ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ປຶ້ມສັງລວມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງແຜນການ ແລະ ການລົງທຶນ

ລວບລວມ ແລະ ຈັດພິມໂດຍ: ກົມນິຕິກຳ, ກະຊວງແຜນການ ແລະ ການລົງທຶນ

ສົມທົບກັບກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ

ປີ 2022

# ຄຳນຳ

ກະຊວງແຜນການ ແລະ ການລົງທຶນ ແມ່ນອົງປະກອບກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານແຜນການ ແລະ ການລົງທຶນ ອັນປະກອບດ້ວຍວຽກງານ ແຜນການລົງທຶນຂອງລັດ, ຮ່ວມມືສາກົນດ້ານການຊ່ວຍເຫຼືອທາງການເພື່ອການພັດທະນາ, ສະຖິຕິແຫ່ງຊາດ, ສົ່ງເສີມການລົງທຶນພາກເອກະຊົນ ແລະ ພັດທະນາເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

ປຶ້ມສັງລວມນິຕິກຳ ຂອງກະຊວງແຜນການ ແລະ ການລົງທຶນ ແມ່ນສະໝຸດປຶ້ມ ທີ່ສັງລວມເອົາບັນດາກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳ ຂອງກະຊວງ ແຜນການ ແລະ ການລົງທຶນ ທີ່ຖືກຮັບຮອງ, ປະກາດໃຊ້ ແລະ ມີຜົນສັກສິດ, ເຊິ່ງໃນປະຈຸບັນ ກະຊວງ ແຜນການ ແລະ ການລົງທຶນ ໄດ້ມີການສ້າງ, ປັບປຸງ ກົດໝາຍ ແລະ ອອກນິຕິກຳໃຕ້ກົດໝາຍ ຈຳນວນຫຼາຍສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານທີ່ຕິດພັນກັບພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ-ຄວາມຮັບຜິດຊອບ ຂອງຂະແໜງແຜນການ ແລະ ການລົງທຶນ ປະກອບມີ: ກົດໝາຍ 4 ສະບັບ, ດຳລັດ 14 ສະບັບ, ຄຳສັ່ງ 5 ສະບັບ, ຂໍ້ຕົກລົງ 5 ສະບັບ ແລະ ຄຳແນະນຳ 7 ສະບັບ.

ປຶ້ມສັງລວມນິຕິກຳຂອງກະຊວງແຜນການ ແລະ ການລົງທຶນຫົວນີ້ ມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການສະໜອງເອກະສານຂໍ້ມູນທາງດ້ານນິຕິກຳ ທີ່ຕິດພັນກັບວຽກງານຂອງຂະແໜງແຜນການ ແລະ ການລົງທຶນ ໃຫ້ແກ່ພະນັກງານ-ລັດຖະກອນ ທົ່ວຂະແໜງແຜນການ ແລະ ການລົງທຶນ ໄດ້ນຳເອົາໃຊ້ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນໃຫ້ຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບ, ທັງເປັນການໂຄສະນາເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງກະຊວງແຜນການ ແລະ ການລົງທຶນໃຫ້ທຸກພາກສ່ວນໄດ້ຮັບຮູ້ ແລະ ເຂົ້າໃຈ ຢ່າງທົ່ວເຖິງ.

ດັ່ງນັ້ນ, ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ປຶ້ມສັງລວມນິຕິກຳເຫຼັ້ມນີ້ ຈະເປັນປະໂຫຍດໃຫ້ແກ່ພະນັກງານ-ລັດຖະກອນ ທົ່ວຂະແໜງແຜນການ ແລະ ການລົງທຶນ ແລະ ພາກສ່ວນຕ່າງໆໃນສັງຄົມ.

**ຮອງນາຍົກລັດຖະມົນຕີ**

**ລັດຖະມົນຕີ**

**ສອນໄຊ ສີພັນດອນ**

# ສາລະບານ

ໜ້າ

## I. ກົດໝາຍ


1. ກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ)
   ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015.......................................................1;
2. ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ)
   ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.....................................................40;
3. ກົດໝາຍວ່າດ້ວຍສະຖິຕິ ( ສະບັບປັບປຸງ )
   ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017..................................................91;
4. ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ
   ສະບັບປັບປຸງປີ 2016 ສະບັບເລກທີ 80/ສພຊ, ລົງວັນທີ 04 ທັນວາ 2019........................130.


## II. ນິຕິກຳໃຕ້ກົດໝາຍ

### 1. ດຳລັດ


1) ດຳລັດວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ
   ສະບັບເລກທີ 135/ນຍ, ລົງວັນທີ 07 ສິງຫາ 2002.................................................134;
2) ດຳລັດວ່າດ້ວຍລະບຽບການຄຸ້ມຄອງ ແລະ ນະໂຍບາຍສົ່ງເສີມການລົງທຶນຂອງເຂດ
   ເສດຖະກິດພິເສດ ສະຫວັນ-ເຊໂນ ສະບັບເລກທີ 177/ນຍ, ລົງວັນທີ 13 ພະຈິກ 2003.........142;
3) ດຳລັດວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວ ແລະການຄຸ້ມຄອງເຂດເສດຖະກິດພິເສດ
   ບໍ່ເຕ່ນແດນຄຳ, ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ ສປປ ລາວ
   ສະບັບເລກທີ 089/ນຍ, ລົງວັນທີ 4 ກຸມພາ 2010 .................................................178;
4) ດຳລັດວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງເຂດເສດຖະກິດພິ
   ເສດສາມຫຼ່ຽມຄຳ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ ສປປ ລາວ,
   ສະບັບເລກທີ 090/ນຍ, ລົງວັນທີ 4 ກຸມພາ 2010 .................................................195;
5) ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການສົ່ງເສີມ ແລະ
   ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018........................213;
6) ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ,
   ລົງວັນທີ 07 ມິຖຸນາ 2018...........................................................................222;
7) ດຳລັດວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ

ຂອງ ສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2019........................ 244;

8) ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019.................................................247;

9) ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການລະດົມທຶນຊ່ວຍເຫຼືອ ທາງການເພື່ອການພັດທະນາ ສປປ ລາວ ຮອດປີ 2030 ສະບັບເລກທີ 236/ລບ, ລົງວັນທີ 18 ພຶດສະພາ 2020 ......................................................................270;

10) ດຳລັດວ່າດ້ວຍການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ສະບັບເລກທີ 624/ລບ, ລົງວັນທີ 21 ທັນວາ 2020............................................271;

11) ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021...............................................306;

12) ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິແຫ່ງຊາດ ສະບັບເລກທີ 682/ນຍ, ລົງວັນທີ 24 ທັນວາ 2021..............................................316;

13) ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຮ່ວມມືລາວ-ຈີນ ສະບັບເລກທີ 683/ນຍ, ລົງວັນທີ 27 ທັນວາ 2021..............................................325;

14) ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຮ່ວມມືທະວິ ພາຄີລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສສ. ຫວຽດນາມ ສະບັບເລກທີ 684/ນຍ, ລົງວັນທີ 27 ທັນວາ 2021..............................................331.

## 2. ຄຳສັ່ງ

1) ຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນ ທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.......................337;

2) ຄຳສັ່ງ ວ່າດ້ວຍການເພີ່ມທະວີການຄຸ້ມຄອງກິດຈະການແຮ່ທາດ ໃນ ສປປ ລາວ ສະບັບເລກທີ 08/ນຍ, ລົງວັນທີ 02 ກໍລະກົດ 2018..............................................345;

3) ຄຳສັ່ງ ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ເນື້ອທີ່ດິນເພື່ອສຳປະທານປູກໄມ້ ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ ສະບັບເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 .....................................................................349;

4) ຄຳສັ່ງ ວ່າດ້ວຍການປະຕິບັດວຽກງານສະຖິຕິລະບົບສາຍຂວາງ ສະບັບເລກທີ 19/ນຍ, ລົງວັນທີ 31 ທັນວາ 2018..................................................354;

5) ຄຳສັ່ງວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການ ອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020 .......358.

**3. ຂໍ້ຕົກລົງ**

1) ຂໍ້ຕົກລົງວ່າດ້ວຍຂໍ້ຫ້າມ ແລະ ວິໄນຂອງພະນັກງານ-ລັດຖະກອນຂອງຂະແໜງແຜນການ ແລະ ການລົງທຶນ ສະບັບເລກທີ 1522/ຜທ, 24 ກໍລະກົດ 2017....................................365;

2) ຂໍ້ຕົກລົງວ່າດ້ວຍການບໍລິຫານ ແລະ ຄຸ້ມຄອງເອກະສານພາຍໃນກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3131/ກຜທ, 12 ທັນວາ 2017....................................370;

3) ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະການຄຸ້ມຄອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນ ຕ່າງປະເທດຢູ່ ສປປ ລາວ ສະບັບເລກທີ 1815/ກຜທ, ລົງວັນທີ 30 ກໍລະກົດ 2018............383;

4) ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການ ການລົງທຶນ ປະຕູດຽວ ຂັ້ນສູນກາງ ສະບັບເລກທີ 002/ຄລທ.ສ, ລົງວັນທີ 20 ສິງຫາ 2018..............................393;

5) ຂໍ້ຕົກລົງ ວ່າດ້ວຍການວາງເງິນຄໍ້າປະກັນສໍາລັບກິດຈະການສໍາປະທານ ສະບັບເລກທີ2735/ກຜທ, ລົງວັນທີ 02 ພະຈິກ 2018..............................................404.

**4. ຄໍາແນະນໍາ**

1) ຄໍາແນະນໍາກ່ຽວກັບການນໍາໃຊ້ຕາປະທັບຂອງ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 001/ຄລທ, ລົງວັນທີ 08 ມິຖຸນາ 2018......................410;

2) ບົດແນະນໍາວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນ ມູນຄ່າເພີ່ມສໍາລັບແຜນນໍາເຂົ້າ ຂອງວິສາຫະກິດ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 ........................................................................412;

3) ຄໍາແນະນໍາ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນ ໃຫ້ເຊົ່າ ຫຼື ສໍາປະທານສໍາລັບປູກພືດກະສິກໍາສະບັບເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019 ........................................................................420;

4) ຄໍາແນະນໍາວ່າດ້ວຍການປະຢັດລາຍຈ່າຍງົບປະມານບໍລິຫານຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0543/ກຜທ, ລົງວັນທີ 03 ເມສາ 2020........................437;

5) ຄໍາແນະນໍາກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ທຶນສົມທົບຂອງລັດຖະບານປະກອບເຂົ້າ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 1987/ກຜທ, ລົງວັນທີ 27 ພະຈິກ 2020............................................448;

6) ຄໍາແນະນໍາກ່ຽວກັບ ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານອາກອນກໍາໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສໍາປະທານທີ່ດິນຂອງລັດ ສະບັບເລກທີ 0760/ກຜທ, ລົງວັນທີ 14 ພຶດສະພາ 2021.... 461;

7) ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 0889/ກຜທ, ລົງວັນທີ 09 ມິຖຸນາ 2021............................................467.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ ເລກທີ 026 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.1.2016

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການລົງທຶນຂອງລັດ ( ສະບັບປັບປຸງ )

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້ 01;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 021/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 15 ມັງກອນ 2016.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ປະກາດໃຊ້ກົດໝາຍວ່າດ້ວຍ ການລົງທຶນຂອງລັດ ( ສະບັບປັບປຸງ ).

**ມາດຕາ 2.** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 021 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ)

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທໍາມະນູນ (ສະບັບປັບປຸງ ປີ 2015 ) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 16 ທັນວາ 2015

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ຮັບຮອງເອົາກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2015

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 72 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2015

# ກົດໝາຍ

# ວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ )

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການສ້າງ, ການພິຈາລະນາຮັບຮອງ, ການຈັດຕັ້ງປະຕິບັດ, ການຄຸ້ມຄອງ ແລະ ການຕິດຕາມ, ກວດກາການລົງທຶນຂອງລັດ ເພື່ອໃຫ້ການລົງທຶນຂອງລັດດຳເນີນໄປຢ່າງຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແນໃສ່ຮັບປະກັນໃຫ້ມີປະສິດທິພາບ, ປະສິດທິຜົນສູງ, ມີຄວາມໂປ່ງໃສ, ເສດຖະກິດມະຫາພາກມີສະຖຽນລະພາບ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ທຸກພາກສ່ວນເສດຖະກິດ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຕາມທິດຍືນຍົງ.

**ມາດຕາ 2 (ປັບປຸງ) ການລົງທຶນຂອງລັດ**

ການລົງທຶນຂອງລັດ ແມ່ນ ການນຳໃຊ້ງົບປະມານແຫ່ງລັດ, ຊັບພະຍາກອນທຳມະຊາດ, ຊັບສິນ, ລິຂະສິດຂອງລັດ ແລະ ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ທີ່ຜ່ານລະບົບງົບປະມານເຂົ້າໃສ່ໂຄງການກໍ່ສ້າງ ພື້ນຖານໂຄງລ່າງທີ່ຮັບໃຊ້ສາທາລະນະປະໂຫຍດ, ສະໜອງອຸປະກອນ ແລະ ສິ່ງເສີມວິຊາການ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

**1. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ** ໝາຍເຖິງ ທິດທາງ, ຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານສະເໜີຕໍ່ ສະພາແຫ່ງຊາດຮັບຮອງເອົາ;

**2. ແຜນການລົງທຶນຂອງລັດ** ໝາຍເຖິງ ແຜນການນໍາໃຊ້ ແລະ ຈັດສັນທຶນຈາກງົບປະມານແຫ່ງລັດລວມມີແຫຼ່ງທຶນພາຍໃນ, ຊັບພະຍາກອນທໍາມະຊາດ, ຊັບສິນ, ຊັບສິນທາງປັນຍາຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ແຫຼ່ງທຶນອື່ນ ເຂົ້າໃນການບັນລຸເປົ້າໝາຍ ຕາມແຜນພັດທະນາເສດຖະກິດ ສັງຄົມແຫ່ງຊາດ;

**3. ການຈັດສັນງົບປະມານການລົງທຶນຂອງລັດ** ໝາຍເຖິງ ການຈັດສັນທຶນຈາກງົບປະມານແຫ່ງລັດ ປະກອບດ້ວຍທຶນຈາກ ງົບປະມານພາຍໃນ ຫຼື ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາໃຫ້ຂະແໜງການ, ທ້ອງຖິ່ນ ຕາມກໍານົດໝາຍບົນພື້ນຖານດັດຊະນີ ຫຼື ຕົວຊີ້ວັດທາງເສດຖະກິດ-ສັງຄົມ ແລະ ນະໂຍບາຍຂອງລັດ;

**4. ໂຄງການລົງທຶນນອກແຜນ** ໝາຍເຖິງ ໂຄງການທີ່ບໍ່ນອນຢູ່ໃນແຜນການລົງທຶນຂອງລັດປະຈໍາປີ ແລະ ຫ້າປີ ທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງເອົາ;

**5. ສາທາລະນະປະໂຫຍດ** ໝາຍເຖິງ ສິ່ງອໍານວຍຄວາມສະດວກທີ່ລັດຖະບານເປັນຜູ້ສະໜອງ ເພື່ອບໍລິການທຸກຄົນໃນສັງຄົມໃຫ້ໄດ້ຮັບຜົນປະໂຫຍດ;

**6. ແຜນງານ** ໝາຍເຖິງ ອົງປະກອບຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍມີເປົ້າໝາຍບັນລຸສະເພາະ ຊຶ່ງລວມມີບັນດາໂຄງການທີ່ມີສ່ວນພົວພັນຊຶ່ງກັນ ແລະ ກັນ ແນໃສ່ຮັບໃຊ້ ຫຼື ບັນລຸເປົ້າໝາຍ ຂອງແຜນງານນັ້ນ;

**7. ໂຄງການ** ໝາຍເຖິງ ກິດຈະກໍາຕ່າງໆທີ່ຕ້ອງປະຕິບັດ ແນໃສ່ເຮັດໃຫ້ວັດຖຸປະສົງຂອງໂຄງການນັ້ນ ບັນລຸຜົນ;

**8. ການກະກຽມໂຄງການ** ໝາຍເຖິງ ການເກັບກໍາ, ວິເຄາະວິໄຈ ແລະ ສຶກສາຂໍ້ມູນຢ່າງລະອຽດ ເພື່ອໃຫ້ໝັ້ນໃຈວ່າ ໂຄງການທີ່ກໍານົດນັ້ນເປັນໂຄງການທີ່ສາມາດປະຕິບັດໄດ້ ແລະ ໃຫ້ຜົນປະໂຫຍດຕອບແທນ ຢ່າງຄຸ້ມຄ່າ ຫຼື ບັນລຸຕາມວັດຖຸປະສົງ, ການກະກຽມໂຄງການ ມີ ສາມໜ້າວຽກຕົ້ນຕໍຄື ການກໍານົດໂຄງຮ່າງໂຄງການ, ການສຶກສາຄວາມເປັນໄປໄດ້ຂອງໂຄງການ ແລະ ການຂຽນບົດລາຍງານໂຄງການ ຫຼື ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ;

**9. ການປະເມີນໂຄງການ** ໝາຍເຖິງ ການຕີລາຄາທາງດ້ານຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິພາບ, ຜົນກະທົບ ແລະ ຄວາມຍືນຍົງຂອງໂຄງການກ່ອນການພິຈາລະນາບັນຈຸໂຄງການ ເຂົ້າໃນແຜນການລົງທຶນຂອງລັດ;

**10. ການປະເມີນຜົນໂຄງການ** ໝາຍເຖິງ ການຕີລາຄາໝາກຜົນການປະຕິບັດໂຄງການ, ການທົບທວນຄືນຜົນການນໍາໃຊ້ໂຄງການ ໂດຍພິຈາລະນາໃນດ້ານຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິ

ພາບ, ຜົນກະທົບ ແລະ ຄວາມຍືນຍົງຂອງໂຄງການ ເພື່ອໃຫ້ຄຳແນະນຳໃນການປັບປຸງ ແລະ ຖອດຖອນບົດຮຽນ;

**11. ການຈັດຕັ້ງປະຕິບັດໂຄງການ** ໝາຍເຖິງ ການນຳເອົາໂຄງການໄປຈັດຕັ້ງປະຕິບັດຕົວຈິງ ພາຍຫຼັງທີ່ໂຄງການໄດ້ບັນຈຸເຂົ້າແຜນການລົງທຶນ ແລະ ຜ່ານການຮັບຮອງຈາກສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ;

**12. ການດຳເນີນງານໂຄງການ** ໝາຍເຖິງ ການປະຕິບັດກິດຈະກຳຕ່າງໆຂອງໂຄງການ ຕາມແຜນດຳເນີນງານຂອງໂຄງການ ນັບແຕ່ເວລາທີ່ໂຄງການໄດ້ຖືກຈັດຕັ້ງປະຕິບັດໄປຈົນຮອດການສຳເລັດ ແລະ ມອບ-ຮັບ ໂຄງການ;

**13. ການຕິດຕາມໂຄງການ** ໝາຍເຖິງ ການກວດກາການດຳເນີນງານໂຄງການ ເພື່ອໃຫ້ຮູ້ກ່ຽວກັບຄວາມຄືບໜ້າ ແລະ ບັນຫາຕ່າງໆ ທີ່ອາດຈະເກີດຂຶ້ນໃນການຈັດຕັ້ງປະຕິບັດໂຄງການ ເພື່ອມີວິທີການແກ້ໄຂໃຫ້ທັນເວລາ;

**14. ເຈົ້າຂອງໂຄງການ** ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ໄດ້ຮັບງົບປະມານການລົງທຶນຂອງລັດ;

**15. ຄະນະຮັບຜິດຊອບໂຄງການ** ໝາຍເຖິງ ຄະນະ ຫຼື ການຈັດຕັ້ງທີ່ຖືກແຕ່ງຕັ້ງຈາກເຈົ້າຂອງໂຄງການ ໃຫ້ຮັບຜິດຊອບໃນການບໍລິຫານ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;

**16. ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງໂຄງການ ເພື່ອຄຸ້ມຄອງ, ນຳໃຊ້ ແລະ ບູລະນະຮັກສາໂຄງການລົງທຶນຂອງລັດ;

**17. ຜູ້ສຳຫຼວດອອກແບບ** ໝາຍເຖິງ ນິຕິບຸກຄົນ ທີ່ເຈົ້າຂອງໂຄງການຈ້າງ ເພື່ອໃຫ້ຄຳປຶກສາ, ເກັບກຳຂໍ້ມູນ, ແຕ້ມ ແລະ ຄິດໄລ່ມູນຄ່າການກໍ່ສ້າງຂອງໂຄງການ;

**18. ທີ່ປຶກສາໂຄງການ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບ ໂຄງການຈ້າງ ເພື່ອໃຫ້ຄຳເຫັນ ຫຼື ຄຳແນະນຳທາງດ້ານເຕັກນິກວິຊາການ ລວມທັງດ້ານການບໍລິຫານ, ຄຸ້ມຄອງ ໃນການປະຕິບັດໂຄງການລົງທຶນຂອງລັດ;

**19. ຜູ້ຮັບເໝົາໂຄງການ** ໝາຍເຖິງ ນິຕິບຸກຄົນທີ່ເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການ ຈ້າງ ຫຼື ມອບເໝົາ ເພື່ອໃຫ້ປະຕິບັດໂຄງການລົງທຶນຂອງລັດ;

**20. ດອກເບ້ຍເງິນກູ້ສຳລັບໂຄງການກູ້ຢືມ** ໝາຍເຖິງ ດອກເບ້ຍເງິນກູ້ທີ່ລັດຖະບານໄດ້ກູ້ຢືມຈາກທະນາຄານພາຍໃນ ຫຼື ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;

**21. ການອ່າຍທຶນ ໝາຍເຖິງ** ການເຄື່ອນຍ້າຍທຶນຈາກໂຄງການໜຶ່ງໄປໃສ່ໂຄງການອື່ນ;

**22. ການປະມູນແບບຮູບການ** ໝາຍເຖິງ ການປະມູນທີ່ຂັດກັບລະບຽບການປະມູນ ເປັນຕົ້ນການສົມຮູ້ຮ່ວມຄິດໃນການປະມູນ ເຊັ່ນ ບໍລິສັດດຽວຊື້ເອົາໝົດຊອງປະມູນແຕ່ອອກຊື່ຫຼາຍບໍລິສັດ;

**23. ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ** ໝາຍເຖິງ ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມໃນເງື່ອນໄຂດອກເບ້ຍຜ່ອນຜັນຈາກຕ່າງປະເທດ ເພື່ອປະຕິບັດໂຄງການລົງທຶນຂອງລັດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບການລົງທຶນຂອງລັດ**

ລັດລົງທຶນເຂົ້າໃສ່ການກໍ່ສ້າງພື້ນຖານໂຄງລ່າງ, ວັດຖຸເຕັກນິກ, ການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກ, ການພັດທະນາຊັບພະຍາກອນມະນຸດ, ການປົກປັກຮັກສາສິ່ງແວດລ້ອມ ຕາມທິດຍືນຍົງ, ການສົ່ງເສີມວິຊາການ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງມີປະສິດທິພາບ, ປະສິດທິຜົນ, ປະຢັດ, ໂປ່ງໃສ ສາມາດກວດສອບໄດ້.

ລັດ ຊຸກຍູ້ ສົ່ງເສີມບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນທຶນຮອນຂອງຕົນເຂົ້າໃນແຜນງານ ຫຼື ໂຄງການລົງທຶນຂອງລັດຕາມລະບຽບການ ດ້ວຍການປະຕິບັດນະໂຍບາຍຕອບແທນຂອງລັດ ຢ່າງເໝາະສົມ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບການລົງທຶນຂອງລັດ**

ການລົງທຶນຂອງລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມສາມາດຕອບສະໜອງທາງດ້ານງົບປະມານແຫ່ງລັດ;

2. ປະຢັດ, ມີຈຸດສຸມ, ມີຄວາມຍຸຕິທຳ, ມີຄວາມສົມສ່ວນລະຫວ່າງເຂດແຄວ້ນ ແລະ ຂົງເຂດວຽກງານ;

3. ປະຕິບັດຕາມແຜນງານ, ໂຄງການທີ່ຢູ່ໃນແຜນການລົງທຶນຂອງລັດ ແລະ ເປັນໂຄງການທີ່ຄວາມຈຳເປັນ ຊຶ່ງພາກສ່ວນເສດຖະກິດອື່ນບໍ່ລົງທຶນ ຫຼື ບໍ່ມີເງື່ອນໄຂ;

4. ຄຸ້ມຄອງການລົງທຶນຂອງລັດຢ່າງເປັນເອກະພາບ, ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນ;

5. ຕິດຕາມ, ກວດກາ ແລະ ປະເມີນຜົນການລົງທຶນຂອງລັດຈາກພາກສ່ວນທີ່ກ່ຽວຂ້ອງ;

6. ມີສ່ວນຮ່ວມຂອງປະຊາຊົນ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການລົງທຶນຂອງລັດ ເປັນຕົ້ນ ໃນການສ້າງ, ການອະນຸມັດ, ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງແຜນການ, ແຜນງານ ແລະ ໂຄງການລົງທຶນຂອງລັດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການລົງທຶນຂອງລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ, ເຕັກໂນໂລຊີ ແລະ ລະດົມແຫຼ່ງທຶນເຂົ້າໃນການພັດທະນາ ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງຊາດ.

# ພາກທີ II
# ການດຳເນີນການລົງທຶນຂອງລັດ
## ໝວດທີ 1
## ປະເພດການລົງທຶນຂອງລັດ

**ມາດຕາ 8 (ປັບປຸງ) ປະເພດການລົງທຶນຂອງລັດ**

ການລົງທຶນຂອງລັດ ມີ ສາມປະເພດ ດັ່ງນີ້:

1. ລັດລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ;
2. ລັດລົງທຶນໃສ່ການສະໜອງວັດຖຸປະກອນ;
3. ລັດລົງທຶນໃສ່ການສົ່ງເສີມວິຊາການ.

**ມາດຕາ 9 (ປັບປຸງ) ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ**

ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ ປະກອບດ້ວຍ ການກໍ່ສ້າງໃໝ່ ແລະ ການບູລະນະສ້ອມແປງໃຫຍ່, ພື້ນຖານໂຄງລ່າງສາທາລະນຸປະໂພກໄດ້ແກ່ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ສຳນັກງານຫ້ອງການ ແລະ ບັນດາພື້ນຖານວັດຖຸເຕັກນິກ.

**ມາດຕາ 10 (ປັບປຸງ) ການລົງທຶນໃສ່ການສະໜອງວັດຖຸປະກອນ**

ການສະໜອງວັດຖຸປະກອນ ປະກອບດ້ວຍ ຊັບສິນ, ພາຫະນະ ແລະ ອຸປະກອນຮັບໃຊ້ການຜະລິດ, ອຸປະກອນເຕັກນິກ-ວິຊາການ, ອຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນີເຈີທີ່ຈຳເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່.

**ມາດຕາ 11 (ປັບປຸງ) ການລົງທຶນໃສ່ການສົ່ງເສີມວິຊາການ**

ການລົງທຶນໃສ່ການສົ່ງເສີມວິຊາການ ປະກອບດ້ວຍ ການເກັບກຳ, ວິເຄາະ, ວິໄຈຂໍ້ມູນ, ສ້າງບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ການສຳຫຼວດ-ອອກແບບໂຄງການ, ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ, ເວນຄືນທີ່ດິນ ແລະ ຄ່າຊົດເຊີຍສິ່ງກີດຂວາງ, ຄ່າຄຸ້ມຄອງໂຄງການ, ຄ່າຈ້າງທີ່ປຶກສາໂຄງການ, ຄ່າຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ການຝຶກອົບຮົມ, ການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ, ການສົ່ງເສີມການຜະລິດ ແລະ ການສ້າງແຜນແມ່ບົດພັດທະນາເສດຖະກິດ-ສັງຄົມ.

## ໝວດທີ 2

## ແຜນການ, ແຜນງານ ແລະ ໂຄງການລົງທຶນຂອງລັດ

### ມາດຕາ 12 ແຜນການລົງທຶນຂອງລັດ

ແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ແຜນການລົງທຶນ ຫ້າປີ ຊຶ່ງສ້າງຂຶ້ນໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ;
2. ແຜນການລົງທຶນປະຈຳປີ ຊຶ່ງສ້າງຂຶ້ນໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ.

### ມາດຕາ 13 ໂຄງປະກອບແຜນການລົງທຶນຂອງລັດ

ແຜນການລົງທຶນຂອງລັດ ປະກອບດ້ວຍ:

1. ແຜນງານການລົງທຶນຂອງລັດ;
2. ໂຄງການລົງທຶນຂອງລັດ.

### ມາດຕາ 14 ແຜນງານການລົງທຶນຂອງລັດ

ແຜນງານການລົງທຶນຂອງລັດ ແມ່ນ ການຜັນຂະຫຍາຍແຜນການລົງທຶນຂອງລັດ ໃຫ້ເປັນອັນລະອຽດ ຊຶ່ງປະກອບດ້ວຍບັນດາໂຄງການທີ່ມີສ່ວນພົວພັນຊຶ່ງກັນ ແລະ ກັນ ແນໃສ່ຮັບໃຊ້ ຫຼື ບັນລຸເປົ້າໝາຍຂອງແຜນງານນັ້ນ.

ແຜນງານມີຫຼາຍລະດັບທີ່ແຕກຕ່າງກັນ ຄື ແຜນງານລະດັບຊາດ, ແຜນງານຂອງຂະແໜງການ ແລະ ທ້ອງຖິ່ນ.

### ມາດຕາ 15 ໂຄງການລົງທຶນຂອງລັດ

ໂຄງການລົງທຶນຂອງລັດ ແມ່ນ ການຜັນຂະຫຍາຍແຜນງານໃຫ້ເປັນອັນລະອຽດ ຊຶ່ງປະກອບດ້ວຍບັນດາກິດຈະກຳທີ່ມີສ່ວນພົວພັນຊຶ່ງກັນ ແລະ ກັນ ແນໃສ່ຮັບໃຊ້ ຫຼື ບັນລຸວັດຖຸປະສົງຂອງໂຄງການນັ້ນ ເພື່ອຫວັງຜົນຕອບແທນທີ່ສາມາດວິເຄາະ, ປະເມີນຜົນໄດ້ ໂດຍມີການກຳນົດເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດ.

### ມາດຕາ 16 (ໃໝ່) ປະເພດໂຄງການລົງທຶນຂອງລັດ

ປະເພດໂຄງການລົງທຶນຂອງລັດ ມີ ດັ່ງນີ້:

1. ໂຄງການລົງທຶນຂອງລັດລະດັບຊາດ;
2. ໂຄງການລົງທຶນຂອງລັດປົກກະຕິ.

**ມາດຕາ 17 (ໃໝ່) ໂຄງການລົງທຶນຂອງລັດລະດັບຊາດ**

ໂຄງການລົງທຶນຂອງລັດລະດັບຊາດ ແມ່ນ ໂຄງການທີ່ມີຄວາມໝາຍກວມລວມທົ່ວປະເທດ, ພົວພັນເຖິງຫຼາຍຂະແໜງການ ແລະ ຫຼາຍທ້ອງຖິ່ນ; ເປັນໂຄງການທີ່ມີລັກສະນະຍຸດທະສາດ, ໃຫ້ຜົນຕອບແທນສູງ, ສາມາດຂັບເຄື່ອນໃຫ້ແກ່ການພັດທະນາ ແລະ ມີຄວາມຍືນຍົງ. ໂຄງການລົງທຶນຂອງລັດລະດັບຊາດ ບໍ່ກຳນົດມູນຄ່າ, ສຳລັບໄລຍະການປະຕິບັດ ແລະ ໄລຍະການຊຳລະໃຫ້ປະຕິບັດຕາມມາດຕາ 18 ແລະ ມາດຕາ 19 ຂອງ ກົດໝາຍສະບັບນີ້.

ການພິຈາລະນາເອົາໂຄງການເຂົ້າແຜນ, ການຮັບຮອງໂຄງການ, ການຄຸ້ມຄອງໂຄງການ ແລະ ການສະໜອງແຫຼ່ງທຶນໃຫ້ປະຕິບັດຕາມໂຄງການປົກກະຕິປະເພດ I.

**ມາດຕາ 18 (ໃໝ່) ໂຄງການລົງທຶນຂອງລັດປົກກະຕິ**

ໂຄງການລົງທຶນຂອງລັດປົກກະຕິ ແມ່ນ ໂຄງການລົງທຶນຂອງລັດ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ເພື່ອປະຕິບັດວຽກງານຈຸດສຸມທີ່ໄດ້ກຳນົດໃນແຜນພັດທະນາຂອງຕົນ.

ໂຄງການລົງທຶນຂອງລັດປົກກະຕິ ມີ 5 ປະເພດ ດັ່ງນີ້:

1. ໂຄງການລົງທຶນຂອງລັດປະເພດ I ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 400.000.000.000 (ສີ່ຮ້ອຍຕື້) ກີບຂຶ້ນໄປ, ໄລຍະປະຕິບັດໂຄງການ ບໍ່ເກີນ ເຈັດປີ;
2. ໂຄງການລົງທຶນຂອງລັດປະເພດ II ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 200.000.000.000 (ສອງຮ້ອຍຕື້) ກີບ ຫາ 400.000.000.000 (ສີ່ຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ຫົກປີ;
3. ໂຄງການລົງທຶນຂອງລັດປະເພດ III ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 100.000.000.000 (ໜຶ່ງຮ້ອຍຕື້) ກີບ ຫາ 200.000.000.000 (ສອງຮ້ອຍຕື້)ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ຫ້າປີ;
4. ໂຄງການລົງທຶນຂອງລັດປະເພດ IV ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 20.000.000.000 (ຊາວຕື້) ກີບ ຫາ 100.000.000.000 (ໜຶ່ງຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ສີ່ປີ;
5. ໂຄງການລົງທຶນຂອງລັດປະເພດ V ແມ່ນ ໂຄງການທີ່ມີມູນຄ່າແຕ່ 20.000.000.000 (ຊາວຕື້) ກີບລົງມາ, ໄລຍະປະຕິບັດໂຄງການ ບໍ່ເກີນ ສາມປີ.

ໂຄງການລົງທຶນຂອງລັດປະເພດ II, III, IV ແລະ V ນຳໃຊ້ພາກລາຍຈ່າຍລົງທຶນຂອງລັດປະຈຳປີ, ໂຄງການລົງທຶນຂອງລັດປະເພດ I ນຳໃຊ້ແຫຼ່ງທຶນອື່ນ ບໍ່ແມ່ນພາກລາຍຈ່າຍລົງທຶນຂອງລັດປະຈຳປີຕາມການຕົກລົງຂອງລັດຖະບານ.

**ມາດຕາ 19 (ໃໝ່) ໄລຍະການຊຳລະໂຄງການລົງທຶນຂອງລັດປົກກະຕິ**

ໄລຍະການຊຳລະໂຄງການລົງທຶນຂອງລັດປົກກະຕິ ໃຫ້ປະຕິບັດ ດັ່ງນີ້:

1. ໂຄງການລົງທຶນຂອງລັດປະເພດ I ມີໄລຍະການຊຳລະບໍ່ເກີນ ສິບປີ;

2. ໂຄງການລົງທຶນຂອງລັດປະເພດ II ມີໄລຍະການຊຳລະບໍ່ເກີນ ເກົ້າປີ;

3. ໂຄງການລົງທຶນຂອງລັດປະເພດ III ມີໄລຍະການຊຳລະບໍ່ເກີນ ເຈັດປີ;

4. ໂຄງການລົງທຶນຂອງລັດປະເພດ IV ມີໄລຍະການຊຳລະບໍ່ເກີນ ຫົກປີ;

5. ໂຄງການລົງທຶນຂອງລັດປະເພດ V ມີໄລຍະການຊຳລະບໍ່ເກີນ ຫ້າປີ.

ສຳລັບໂຄງການຊ່ວຍເຫຼືອທາງການ ເພື່ອການພັດທະນາການຊຳລະ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້.

**ມາດຕາ 20 (ປັບປຸງ) ຄ່າໃຊ້ຈ່າຍລວມໃນການປະຕິບັດກິດຈະກຳຂອງໂຄງການລົງທຶນຂອງລັດ**

ຄ່າໃຊ້ຈ່າຍລວມໃນການປະຕິບັດກິດຈະກຳ ຂອງໂຄງການລົງທຶນຂອງລັດ ມີ ດັ່ງນີ້:

1. ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ:

- ຄ່າໃຊ້ຈ່າຍໃນການກະກຽມໂຄງການ ມີ ການເກັບກຳ, ວິເຄາະ, ວິໄຈຂໍ້ມູນ ແລະ ສ້າງບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ສຳຫຼວດ-ອອກແບບໂຄງການ, ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ, ຄ່າຊົດເຊີຍ ແລະ ເວນຄືນສິ່ງກີດຂວາງໃນການປະຕິບັດໂຄງການ;
- ຄ່າໃຊ້ຈ່າຍໃນການປະຕິບັດໂຄງການ ມີ ຄ່າວັດສະດຸ, ອຸປະກອນ ແລະ ຄ່າແຮງງານ;
- ຄ່າໃຊ້ຈ່າຍໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ;
- ຄ່າໃຊ້ຈ່າຍທົດລອງນຳໃຊ້;
- ຄ່າໃຊ້ຈ່າຍຄຸ້ມຄອງໂຄງການ;
- ຄ່າທີ່ປຶກສາໂຄງການ;
- ຄ່າອາກອນ;
- ດອກເບ້ຍເງິນກູ້ສຳລັບໂຄງການກູ້ຢືມ.

2. ໂຄງການສະໜອງວັດຖຸປະກອນ:

- ຄ່າຊື້ພາຫະນະ ແລະ ວັດຖຸປະກອນຮັບໃຊ້ການຜະລິດ;
- ຄ່າຊື້ເຄື່ອງເຕັກນິກ-ວິຊາການ ແລະ ຊັບສິນ;
- ຄ່າຊື້ວັດຖຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນີເຈີທີ່ຈຳເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່.

3. ໂຄງການສົ່ງເສີມວິຊາການ ທີ່ບໍ່ຕິດພັນກັບການກໍ່ສ້າງ ແລະ ສະໜອງວັດຖຸປະກອນ:

- ຄ່າຝຶກອົບຮົມ;
- ຄ່າຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ;
- ຄ່າສົ່ງເສີມການຜະລິດ;

- ຄ່າສ້າງແຜນແມ່ບົດພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 21 (ໃໝ່) ການກຳນົດໂຄງການລົງທຶນຂອງລັດ**

ໂຄງການລົງທຶນຂອງລັດ ສາມາດກຳນົດໄດ້ ດັ່ງນີ້:

1. ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ.
2. ໂຄງການສະໜອງວັດຖຸປະກອບ.
3. ໂຄງການສົ່ງເສີມວິຊາການ:

- ໂຄງການສຶກສາຄວາມເປັນໄປໄດ້ຂອງໂຄງການ;
- ໂຄງການສຳຫຼວດ-ອອກແບບໂຄງການ;
- ໂຄງການຊົດເຊີຍ ແລະ ເວນຄືນສິ່ງກີດຂວາງ;
- ໂຄງການວ່າຈ້າງທີ່ປຶກສາໂຄງການ;
- ໂຄງການໃຊ້ຈ່າຍຄຸ້ມຄອງໂຄງການ;
- ໂຄງການຕິດຕາມ, ກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
- ໂຄງການສົ່ງເສີມວິຊາການອື່ນ ທີ່ບໍ່ຕິດພັນກັບການກໍ່ສ້າງ ແລະ ການສະໜອງວັດຖຸປະກອບ.

ການຄິດໄລ່ມູນຄ່າໂຄງການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ປັບປຸງ) ເອກະສານໂຄງການລົງທຶນຂອງລັດ**

ເອກະສານໂຄງການລົງທຶນຂອງລັດ ມີ ດັ່ງນີ້:

1. ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ:

- ບົດສະເໜີໂຄງການ;
- ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ;
- ບົດລາຍງານການສຳຫຼວດ-ອອກແບບ;
- ໃບຢັ້ງຢືນແບບ ແລະ ມູນຄ່າໂຄງການຂອງຂະແໜງການທີ່ກ່ຽວຂ້ອງ;
- ໃບຢັ້ງຢືນການປະເມີນໂຄງການ;
- ໃບໂອນສິດນຳໃຊ້ທີ່ດິນເພື່ອສາທາລະນະປະໂຫຍດໃນກໍລະນີທີ່ມີການນຳໃຊ້ທີ່ດິນຂອງປະຊາຊົນ;

ສຳລັບໂຄງການລົງທຶນຂອງລັດປະເພດ I, II ແລະ III ທີ່ນຳໃຊ້ເຕັກນິກສູງ, ຕ້ອງປະກອບເອກະສານເພີ່ມຕື່ມອີກ ດັ່ງນີ້:

- ບົດພັດທະນາໂຄງການ ຫຼື ບົດວິພາກເສດຖະກິດ-ເຕັກນິກ;
- ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ.

2. ໂຄງການສະໜອງວັດຖຸປະກອນ:

- ບົດສະເໜີໂຄງການ;
- ໃບປະເມີນລາຄາ;
- ໃບກຳນົດຂໍ້ມູນສະເພາະຂອງວັດຖຸປະກອນ;
- ໃບຢັ້ງຢືນການປະເມີນໂຄງການ.

3. ໂຄງການສົ່ງເສີມວິຊາການ:

- ບົດສະເໜີໂຄງການ;
- ແຜນດຳເນີນງານ;
- ໃບປະເມີນມູນຄ່າໂຄງການ;
- ໃບຢັ້ງຢືນການປະເມີນໂຄງການ.

**ມາດຕາ 23 ຂັ້ນຕອນກ່ຽວກັບການລົງທຶນຂອງລັດ**

ຂັ້ນຕອນກ່ຽວກັບການລົງທຶນຂອງລັດ ມີ ດັ່ງນີ້:

1. ການສ້າງ, ພິຈາລະນາ ແລະ ຮັບຮອງເອົາແຜນການລົງທຶນຂອງລັດ;
2. ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ;
3. ການກວດກາ, ກວດການ ແລະ ລາຍງານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ;
4. ການມອບຮັບ ແລະ ນຳໃຊ້ໂຄງການລົງທຶນຂອງລັດ.

## ໝວດທີ 3

## ການສ້າງ, ພິຈາລະນາ ແລະ ຮັບຮອງເອົາແຜນການລົງທຶນຂອງລັດ

**ມາດຕາ 24 (ໃໝ່) ການຈັດສັນງົບປະມານການລົງທຶນຂອງລັດ**

ງົບປະມານການລົງທຶນຂອງລັດປະຈຳປີ ຕ້ອງຈັດສັນໃຫ້ແຂວງ, ນະຄອນຫຼວງບໍ່ຫຼຸດ ຫ້າສິບສ່ວນຮ້ອຍ (50%) ຂອງທຶນທັງໝົດ, ສ່ວນທີ່ເຫຼືອ ແມ່ນຈັດສັນໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ.

**ມາດຕາ 25 ບ່ອນອີງໃນການສ້າງແຜນການລົງທຶນຂອງລັດ**

ບ່ອນອີງໃນການສ້າງແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແຜນພັດທະນາຂອງຂະແໜງການ, ທ້ອງຖິ່ນ ແລະ ເຂດແຄ້ວນ, ເຂດເສດຖະກິດຈຸດສຸມ;

2. ແຜນແມ່ບົດພັດທະນາພື້ນຖານໂຄງລ່າງເຕັກນິກ, ແຜນການນຳໃຊ້ທີ່ດິນ, ແຜນແມ່ບົດໃນ

ການນຳໃຊ້ແຫຼ່ງນ້ຳ, ຊັບພະຍາກອນປ່າໄມ້, ບໍ່ແຮ່ ແລະ ແຫຼ່ງຊັບພະຍາກອນທຳມະຊາດອື່ນ;

3. ກຳນົດໝາຍການຈັດສັນທຶນຂອງລັດ;

4. ຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນໄລຍະຜ່ານມາ;

5. ຄວາມສາມາດດູນດ່ຽງແຫຼ່ງທຶນ;

6. ທ່າແຮງບົ່ມຊ້ອນຂອງຂະແໜງການ, ທ້ອງຖິ່ນ ແລະ ເຂດແຄ້ວນ.

**ມາດຕາ 26 (ປັບປຸງ) ບ່ອນອີງໃນການຈັດສັນງົບປະມານການລົງທຶນຂອງລັດ**

ບ່ອນອີງໃນການຈັດສັນງົບປະມານການລົງທຶນຂອງລັດ ຕ້ອງຈັດສັນຕາມແຜນງານ, ໂຄງການ ບົນພື້ນຖານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຮັບປະກັນໃຫ້ມີການສົມສ່ວນລະຫວ່າງຂົງເຂດຕ່າງໆ ເປັນຕົ້ນ ຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນດາຂະແໜງການ ລະຫວ່າງສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 27 (ໃໝ່) ກຳນົດໝາຍການຈັດສັນງົບປະມານການລົງທຶນຂອງລັດ**

ການຈັດສັນງົບປະມານການລົງທຶນຂອງລັດໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ຕ້ອງອີງໃສ່ວິໄສທັດ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ການແບ່ງຂັ້ນຄຸ້ມຄອງ, ຄວາມຕ້ອງການ ແລະ ຄວາມສາມາດໃນການສະໜອງງົບປະມານຕົວຈິງ.

ການຈັດສັນງົບປະມານການລົງທຶນຂອງລັດໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ໄດ້ກຳນົດໄວ້ ໃນລະບຽບການຕ່າງຫາກ.

ການຈັດສັນງົບປະມານການລົງທຶນຂອງລັດໃຫ້ອົງການປົກຄອງທ້ອງຖິ່ນຕ້ອງອີງໃສ່ກຳນົດໝາຍດັ່ງນີ້:

1. ລະດັບຄວາມທຸກຍາກ ແລະ ການພັດທະນາ;

2. ພັນທະໃນການປະກອບສ່ວນດ້ານລາຍຮັບງົບປະມານແຫ່ງລັດ;

3. ເນື້ອທີ່ທາງພູມສາດ;

4. ຈຳນວນປະຊາກອນ;

5. ຈຳນວນຫົວໜ່ວຍບໍລິຫານການປົກຄອງ.

**ມາດຕາ 28 ອົງການຮັບຜິດຊອບສ້າງແຜນການລົງທຶນຂອງລັດ**

ອົງການຮັບຜິດຊອບສ້າງແຜນການລົງທຶນຂອງລັດ ມີ ດັ່ງນີ້::

1. ລັດຖະບານ;

2. ກະຊວງແຜນການ ແລະ ການລົງທຶນ;

3. ກະຊວງ, ອົງການລັດທຽບເທົ່າກະຊວງ;

4. ອົງການປົກຄອງແຂວງ, ນະຄອນຫຼວງ;

5. ອົງການປົກຄອງເມືອງ, ເທດສະບານ, ນະຄອນ.

**ມາດຕາ 29 (ປັບປຸງ) ລັດຖະບານ**

ລັດຖະບານ ເປັນຜູ້ກຳນົດທິດທາງ, ຄາດໝາຍລວມໃນການສ້າງແຜນການລົງທຶນຂອງລັດ ບົນພື້ນຖານການຄົ້ນຄວ້າຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບບັນດາປັດໄຈຕ່າງໆ ເປັນຕົ້ນ ແຫຼ່ງທຶນ ແລະ ການດຸນດ່ຽງມະຫາພາກ.

**ມາດຕາ 30 (ປັບປຸງ) ກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນເປັນໃຈກາງປະສານງານກັບບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຄົ້ນຄວ້າສ້າງ, ຜັນຂະຫຍາຍທິດທາງ ແລະ ຄາດໝາຍລວມຂອງລັດຖະບານ ແລ້ວແນະນຳດ້ານວິຊາການກ່ຽວກັບການສ້າງແຜນການໃຫ້ຂະແໜງການ ແລະ ທ້ອງຖິ່ນ, ຈາກນັ້ນຈຶ່ງຄົ້ນຄວ້າ, ສັງລວມແຜນການລົງທຶນຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ທ້ອງຖິ່ນ ເພື່ອສ້າງແຜນການລົງທຶນຂອງລັດໃນທົ່ວປະເທດ ເພື່ອນຳສະເໜີລັດຖະບານພິຈາລະນາ.

**ມາດຕາ 31 (ປັບປຸງ) ກະຊວງ, ອົງການລັດທຽບເທົ່າກະຊວງ**

ກະຊວງ, ອົງການລັດທຽບເທົ່າກະຊວງ ຊີ້ນຳພາກສ່ວນຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນສ້າງແຜນການລົງທຶນຂອງລັດໃນຂັ້ນຂອງຕົນ ເພື່ອນຳສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ.

**ມາດຕາ 32 (ໃໝ່) ອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຂັ້ນແຂວງ ເປັນເຈົ້າການໃນການຄົ້ນຄວ້າສ້າງ, ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ຫ້າປີ ແລະ ປະຈຳປີ ຂອງຕົນ;

2. ຂັ້ນເມືອງ ເປັນເຈົ້າການໃນການຄົ້ນຄວ້າສ້າງ, ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ຫ້າປີ ແລະ ປະຈຳປີ ຂອງຕົນ.

**ມາດຕາ 33 (ປັບປຸງ) ເງື່ອນໄຂພື້ນຖານໃນການພິຈາລະນາຮັບເອົາໂຄງການລົງທຶນຂອງລັດ**

ເງື່ອນໄຂພື້ນຖານໃນການພິຈາລະນາຮັບເອົາໂຄງການລົງທຶນເຂົ້າໃນແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;

2. ເປັນໂຄງການທີ່ຮັບປະກັນໃຫ້ມີປະສິດທິຜົນສູງທາງດ້ານເສດຖະກິດ-ສັງຄົມ;

3. ເປັນໂຄງການທີ່ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ, ບໍ່ແຕະຕ້ອງປູຊະນີຍະສະຖານ, ວັດຖຸບູຮານ, ປ່າສະຫງວນ, ປ່າປ້ອງກັນ ຫຼື ທີ່ດິນ ຊຶ່ງໄດ້ຮັບອະນຸຍາດໃຫ້ນຳໃຊ້ ເພື່ອສາທາລະນະປະໂຫຍດແລ້ວ;

4. ມີເອກະສານປະກອບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້;

5. ໄດ້ຮັບການເຫັນດີຈາກກະຊວງ, ອົງການລັດທຽບເທົ່າກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

6. ໄດ້ຜ່ານການປະເມີນຕາມຫຼັກວິຊາການ ຈາກອົງການປະເມີນໂຄງການລົງທຶນຂອງລັດແຕ່ລະຂັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້;

7. ຖືກກຳນົດໃນທິດທາງແຜນການລົງທຶນຂອງລັດ ຫ້າປີ.

ສຳລັບໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ຕ້ອງມີການຢັ້ງຢືນແຫຼ່ງທຶນຈະແຈ້ງກ່ອນ ຈຶ່ງສາມາດກຳນົດເອົາໂຄງການນັ້ນເຂົ້າໃນແຜນການລົງທຶນຂອງລັດ.

**ມາດຕາ 34 (ປັບປຸງ) ການປະເມີນ ແລະ ອົງການປະເມີນໂຄງການລົງທຶນຂອງລັດ**

ການປະເມີນໂຄງການລົງທຶນຂອງລັດ ຕ້ອງໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ນຳໃຊ້ເຄື່ອງມືການປະເມີນໂຄງການທີ່ກະຊວງແຜນການ ແລະ ການລົງທຶນວາງອອກ.

ອົງການປະເມີນໂຄງການລົງທຶນຂອງລັດ ປະກອບດ້ວຍ:

1. ກະຊວງແຜນການ ແລະ ການລົງທຶນ ປະເມີນໂຄງການລົງທຶນຂອງລັດຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ປະເມີນໂຄງການລົງທຶນຂອງລັດປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ;

2. ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ປະເມີນໂຄງການລົງທຶນຂອງລັດປະເພດ V ຂອງຕົນ.

**ມາດຕາ 35 (ປັບປຸງ) ການຈັດບູລິມະສິດໂຄງການເຂົ້າໃນແຜນການລົງທຶນຂອງລັດ**

ການຈັດບູລິມະສິດໂຄງການລົງທຶນຂອງລັດເຂົ້າໃນແຜນການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ເປັນໂຄງການທີ່ເປັນບູລິມະສິດຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ;

2. ເປັນໂຄງການທີ່ມີເປົ້າໝາຍສອດຄ່ອງກັບເປົ້າໝາຍຂອງຂົງເຂດ, ຂະແໜງການຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ຫ້າປີ;

3. ເປັນໂຄງການທີ່ມີຜົນຕອບແທນສູງທາງດ້ານເສດຖະກິດ-ສັງຄົມ ແລະ ຮັບປະກັນການພັດທະນາແບບຍືນຍົງ;

4. ເປັນໂຄງການແກ້ໄຂໄພພິບັດທາງທຳມະຊາດ ແລະ ເຫດສຸກເສີນອື່ນ;

5. ເປັນໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ທີ່ຮຽກຮ້ອງໃຫ້ມີທຶນສົມທົບຈາກງົບປະມານພາຍໃນ.

**ມາດຕາ 36 (ໃໝ່) ການພິຈາລະນາແຜນການລົງທຶນຂອງລັດ**

ລັດຖະບານ ເປັນຜູ້ພິຈາລະນາໂຄງການລົງທຶນຂອງລັດລະດັບຊາດ, ໂຄງການລົງທຶນຂອງລັດປະເພດ I, II ແລະ III ເຂົ້າໃນແຜນການລົງທຶນລົງທຶນຂອງລັດ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ.

ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າ, ພິຈາລະນາໂຄງການລົງທຶນຂອງລັດປະເພດ IV ແລະ V ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການລົງທຶນຂອງລັດປະເພດ IV ຂອງແຂວງ, ນະຄອນຫຼວງ ເຂົ້າໃນແຜນການລົງທຶນຂອງລັດຕາມການສະເໜີຂອງລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ.

ແຂວງ, ນະຄອນຫຼວງຄົ້ນຄວ້າ, ພິຈາລະນາໂຄງການລົງທຶນຂອງລັດປະເພດ V ຂອງຕົນເຂົ້າໃນແຜນການລົງທຶນຂອງລັດ ຕາມການສະເໜີຂອງພະແນກແຜນການ ແລະ ການລົງທຶນ.

**ມາດຕາ 37 (ໃໝ່) ການຮັບຮອງເອົາແຜນການລົງທຶນຂອງລັດ**

ອົງການທີ່ມີສິດຮັບຮອງເອົາແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ສະພາແຫ່ງຊາດ;
2. ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 38 (ໃໝ່) ສະພາແຫ່ງຊາດ**

ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ ວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ ແລະ ປະຈຳປີ, ແຜນຈັດສັນງົບປະມານການລົງທຶນຂອງລັດ ຫ້າປີ, ໂຄງການລົງທຶນຂອງລັດ ລະດັບຊາດປະຈຳປີ, ແຜນການລົງທຶນຂອງລັດປະຈຳປີ, ໂຄງການລົງທຶນຂອງລັດປະເພດ I ແລະແຜນຈັດສັນງົບ ປະມານຂອງໂຄງການລົງທຶນຂອງລັດ ປະເພດ II, III, IV ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ແຜນຈັດສັນງົບປະມານການລົງທຶນຂອງລັດ, ໂຄງການລົງທຶນຂອງລັດປະເພດ V ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ຮ່າງເອກະສານດັ່ງກ່າວ ຕ້ອງສົ່ງເຖິງສະພາແຫ່ງຊາດ ຢ່າງຊ້າສິບຫ້າ ວັນລັດຖະການ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ,

ສຳລັບໂຄງການລົງທຶນຂອງລັດລະດັບຊາດ, ໂຄງການລົງທຶນຂອງລັດປະເພດ I ນັ້ນ ສະພາແຫ່ງຊາດພິຈາລະນາເປັນແຕ່ລະໂຄງການ ຕາມການສະເໜີຂອງລັດຖະບານ.

**ມາດຕາ 39 (ໃໝ່) ສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາ ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ຫ້າປີ ແລະ ປະຈຳປີ ຂັ້ນແຂວງ, ແຜນການລົງທຶນຂອງລັດ ຫ້າປີ, ແຜນການລົງທຶນຂອງລັດປະຈຳປີ, ໂຄງການລົງທຶນຂອງລັດປະເພດ V ຂອງແຂວງ, ນະຄອນຫຼວງ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ແຕ່ກ່ອນນຳສະເໜີສະພາປະຊາຊົນຂັ້ນແຂວງຮັບຮອງ ຕ້ອງສົ່ງຮ່າງແຜນການລົງທຶນໃຫ້ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າມີຄຳເຫັນກ່ຽວກັບຄວາມສອດຄ່ອງດ້ານນະໂຍບາຍການພັດທະນາ ແລະ ກົດໝາຍວ່າດ້ວຍ ການລົງທຶນຂອງລັດ, ຮ່າງເອກະສານດັ່ງກ່າວ ຕ້ອງສົ່ງເຖິງສະພາປະຊາຊົນຂັ້ນແຂວງຢ່າງຊ້າ ສິບຫ້າວັນ ລັດຖະການ ກ່ອນວັນເປີດກອງປະຊຸມສະພາປະຊາຊົນຂັ້ນແຂວງ. ພາຍຫຼັງສະພາປະຊາຊົນຂັ້ນແຂວງຮັບຮອງແລ້ວກໍສາມາດຈັດຕັ້ງປະຕິບັດໄດ້.

## ໝວດທີ 4
## ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ

**ມາດຕາ 40 ອົງການຮັບຜິດຊອບກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ**

ອົງການຮັບຜິດຊອບກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ລັດຖະບານ;
2. ກະຊວງແຜນການ ແລະ ການລົງທຶນ;
3. ກະຊວງການເງິນ;
4. ກະຊວງ, ອົງການລັດທຽບເທົ່າກະຊວງ;
5. ອົງການປົກຄອງທ້ອງຖິ່ນ.

**ມາດຕາ 41 (ປັບປຸງ) ລັດຖະບານ**

ລັດຖະບານ ອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ ພາຍໃນ ສິບຫ້າວັນ ພາຍຫຼັງທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ.

ລັດຖະບານ ແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປະເພດ I ຊຶ່ງປະກອບດ້ວຍຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 42 ກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດປະຈຳປີ ພາຍໃນ ສິບຫ້າວັນ ພາຍຫຼັງທີ່ລັດຖະບານໄດ້ອອກ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນການດັ່ງກ່າວ.

**ມາດຕາ 43 ກະຊວງການເງິນ**

ກະຊວງການເງິນ ເປັນຜູ້ຄຸ້ມຄອງ, ຕິດຕາມການສະໜອງ ແລະ ການນໍາໃຊ້ງົບປະມານຂອງລັດ ເພື່ອຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ.

**ມາດຕາ 44 (ປັບປຸງ) ກະຊວງ, ອົງການລັດທຽບເທົ່າກະຊວງ**

ກະຊວງ, ອົງການລັດທຽບເທົ່າກະຊວງ ມີຄວາມຮັບຜິດຊອບໂດຍກົງ ໃນການຈັດຕັ້ງປະຕິບັດ ໂຄງການລົງທຶນຂອງລັດປະເພດ I, II, III, IV ແລະ V ຂອງຕົນໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີ ກະຊວງ, ອົງການລັດທຽບເທົ່າກະຊວງມອບໂຄງການໃຫ້ທ້ອງຖິ່ນປະຕິບັດນັ້ນ ຕ້ອງມອບແຕ່ຫົວທີ ໂດຍເລີ່ມແຕ່ຂັ້ນການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 46 ຂອງກົດໝາຍສະບັບນີ້.

**ມາດຕາ 45 (ປັບປຸງ) ອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງຂັ້ນແຂວງ ຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ປະເພດ I, II, III, IV ແລະ V ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ອົງການປົກຄອງຂັ້ນເມືອງ ຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ມີມູນຄ່າແຕ່ 5.000.000.000 (ຫ້າຕື້) ກີບລົງມາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. ສໍາລັບເມືອງທີ່ມີເງື່ອນໄຂ ກໍສາມາດຈັດຕັ້ງປະຕິບັດໂຄງການ ທີ່ມີມູນຄ່າສູງກວ່າ 5.000.000.000 (ຫ້າຕື້) ກີບ ແຕ່ບໍ່ເກີນ 20.000.000.000 (ຊາວຕື້) ກີບ ໂດຍການຕົກລົງເຫັນດີຂອງອົງການປົກຄອງແຂວງ, ນະຄອນຫຼວງ.

ໃນກໍລະນີທ້ອງຖິ່ນທີ່ໄດ້ຮັບໂຄງການລົງທຶນຂອງລັດຈາກກະຊວງ, ອົງການລັດທຽບເທົ່າກະຊວງ ໃຫ້ຈັດຕັ້ງປະຕິບັດ ກໍໃຫ້ທ້ອງຖິ່ນປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 46 ຂັ້ນຕອນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ**

ໂຄງການລົງທຶນຂອງລັດ ໃຫ້ຈັດຕັ້ງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ;
2. ຈັດຕັ້ງປະມູນໂຄງການລົງທຶນຂອງລັດ;
3. ສ້າງສັນຍາໂຄງການລົງທຶນຂອງລັດ;
4. ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ.

**ມາດຕາ 47 (ປັບປຸງ) ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ**

ພາຍຫຼັງແຜນການລົງທຶນຂອງລັດປະຈໍາປີ ຖືກຮັບຮອງ ແລະ ຮອດໄລຍະເລີ່ມຈັດຕັ້ງປະຕິບັດ ປີ

ງົບປະມານ ເຈົ້າຂອງໂຄງການຕ້ອງແຕ່ງຕັ້ງຄະນະຮັບຜິດຊອບໂຄງການ, ຄະນະຮັບຜິດຊອບໂຄງການປະກອບດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງເຈົ້າຂອງໂຄງການ, ຜູ້ຕາງໜ້າຈາກຂະແໜງການການເງິນ, ຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມນຳ ເພື່ອດຳເນີນການຄຸ້ມຄອງໂຄງການໃຫ້ສອດຄ່ອງກັບເປົ້າໝາຍ, ແຜນດຳເນີນງານ ແລະ ທັນກັບກຳນົດເວລາ.

**ມາດຕາ 48 (ປັບປຸງ) ການຈັດຕັ້ງປະມູນໂຄງການລົງທຶນຂອງລັດ**

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕ້ອງມີການປະມູນ, ການຈັດຕັ້ງປະມູນຕ້ອງປະຕິບັດຕາມນິຕິກຳທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ຮັບປະກັນການເປີດກວ້າງ, ໃຫ້ມີຄວາມໂປ່ງໃສ ສາມາດກວດສອບໄດ້, ມີຄວາມສະເໝີພາບ ແລະ ຍຸຕິທຳ.

ການປະມູນໂຄງການລົງທຶນຂອງລັດ ຕ້ອງມີຜູ້ຕາງໜ້າຈາກຂະແໜງການການເງິນ, ຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມນຳ.

ເຈົ້າຂອງໂຄງການ ເປັນຜູ້ຄົ້ນຄວ້າຕົກລົງສະຖານທີ່ຈັດຕັ້ງການປະມູນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ການປະມູນທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເປັນຕົ້ນ ການປະມູນແບບຮູບການ ຖືວ່າເປັນໂມຄະ.

ການປະມູນໂຄງການລົງທຶນຂອງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 49 (ໃໝ່) ການສ້າງສັນຍາ ໂຄງການລົງທຶນຂອງລັດ**

ເຈົ້າຂອງໂຄງການ ສ້າງສັນຍາປະຕິບັດໂຄງການລົງທຶນຂອງລັດ ກັບ ຜູ້ຮັບເໝົາ, ຜູ້ສະໜອງ ແລະ ຜູ້ໃຫ້ບໍລິການໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 50 (ໃໝ່) ການຄ້ຳປະກັນສັນຍາຮັບເໝົາ ແລະ ການຄ້ຳປະກັນໂຄງການລົງທຶນຂອງລັດ**

ການຄ້ຳປະກັນສັນຍາຮັບເໝົາ ແມ່ນ ຜູ້ຮັບເໝົາ, ຜູ້ສະໜອງ, ຜູ້ໃຫ້ບໍລິການ ຕ້ອງວາງເງິນຄ້ຳປະກັນສັນຍາ ໃຫ້ເຈົ້າຂອງໂຄງການ ພາຍຫຼັງທີ່ໄດ້ມີການເຊັນສັນຍາ.

ການຄ້ຳປະກັນໂຄງການ ແມ່ນ ຜູ້ຮັບເໝົາ, ຜູ້ສະໜອງ, ຕ້ອງວາງເງິນຄ້ຳປະກັນໂຄງການ ໃຫ້ເຈົ້າຂອງໂຄງການ.

ອັດຕາ ແລະ ກຳນົດເວລາ ຄ້ຳປະກັນສັນຍາ ແລະ ຄ້ຳປະກັນໂຄງການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 51 (ປັບປຸງ) ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ມີການປະກອບສ່ວນທຶນຂອງປະຊາຊົນ**

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ມີການປະກອບສ່ວນທຶນຂອງປະຊາຊົນ ຊຶ່ງໃນ

ນັ້ນມີ ທຶນຂອງລັດກວມເອົາແຕ່ ສາມສິບສ່ວນຮ້ອຍ (30%) ຂອງທຶນທັງໝົດຂຶ້ນໄປ ໃຫ້ປະຕິບັດຕາມກົດໝາຍສະບັບນີ້, ຖ້າວ່າທຶນຂອງລັດຖະບານ ຫາກຕ່ຳກວ່າ ສາມສິບສ່ວນຮ້ອຍ (30%) ຂອງທຶນທັງໝົດ ໃຫ້ປະຕິບັດຕາມການຕົກລົງລະຫວ່າງ ເຈົ້າຂອງໂຄງການກັບປະຊາຊົນ.

### ມາດຕາ 52 (ປັບປຸງ) ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ຫຼື ກົດໝາຍ, ລະບຽບການອື່ນທີ່ກ່ຽວຂ້ອງ ຫຼື ສັນຍາ ແລະ ອະນຸສັນຍາ ລະຫວ່າງ ລັດຖະບານກັບຜູ້ໃຫ້ທຶນ.

### ມາດຕາ 53 ການຕິດຕາມກວດກາ, ກວດການ ແລະ ປະເມີນຜົນໂຄງການລົງທຶນຂອງລັດ

ພາຍຫຼັງທີ່ໄດ້ປະຕິບັດໂຄງການລົງທຶນຂອງລັດມາໃນໄລຍະໃດໜຶ່ງແລ້ວ ຕ້ອງປະຕິບັດ ດັ່ງນີ້:

1. ຕິດຕາມກວດກາ, ກວດການ ການຈັດຕັ້ງປະຕິບັດໂຄງການ ເປັນປົກກະຕິ;

2. ດຳເນີນການປະເມີນຜົນເປັນແຕ່ລະໄລຍະ ເປັນຕົ້ນ ປະເມີນຜົນໃນເວລາຈັດຕັ້ງປະຕິບັດໂຄງການ.

ເນື້ອໃນການກວດກາ, ກວດການ ແລະ ປະເມີນຜົນ ຕົ້ນຕໍ ມີ ດັ່ງນີ້:

1. ຄວາມສອດຄ່ອງກັບແຜນພັດທະນາໂຄງການ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ;

2. ປະສິດທິພາບຂອງການນຳໃຊ້ງົບປະມານ ແລະ ຄວາມຄືບໜ້າໃນການປະຕິບັດໂຄງການ;

3. ປະສິດທິຜົນໄດ້ບັນລຸຕາມຈຸດປະສົງ, ເປົ້າໝາຍຂອງໂຄງການ;

4. ຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ;

5. ໝາກຜົນຂອງໂຄງການໄດ້ຮັບການນຳໃຊ້ຢ່າງຖືກຕ້ອງກັບເປົ້າໝາຍຂອງໂຄງການ ແລະ ປະກອບສ່ວນນຳເອົາຜົນປະໂຫຍດມາສູ່ສັງຄົມ.

ໃນການກວດກາ, ກວດການ ແລະ ປະເມີນຜົນ ຖ້າຫາກພົບເຫັນບັນຫາໃດໜຶ່ງ ຕ້ອງມີມາດຕະການ ແລະ ວິທີການແກ້ໄຂໃຫ້ທັນການ.

### ມາດຕາ 54 (ປັບປຸງ) ການດັດແກ້ມູນຄ່າໂຄງການລົງທຶນຂອງລັດ

ໃນການດັດແກ້ມູນຄ່າໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການດັດແກ້ໂຄງການລົງທຶນຂອງລັດ ມີ ດັ່ງນີ້:

- ສະພາແຫ່ງຊາດ ພິຈາລະນາການດັດແກ້ ໃນມູນຄ່າຂອງການດັດແກ້ຫຼາຍກວ່າ 50.000.000.000 (ຫ້າສິບຕື້) ກີບຂຶ້ນໄປ ຕາມການສະເໜີຂອງລັດຖະບານ;
- ລັດຖະບານ ພິຈາລະນາດັດແກ້ ໃນມູນຄ່າຂອງການດັດແກ້ ຫຼາຍກວ່າ 10.000.000.000

(ສິບຕື້) ກີບ ຫາ 50.000.000.000 (ຫ້າສິບຕື້) ກີບ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ;

- ກະຊວງແຜນການ ແລະ ການລົງທຶນ ພິຈາລະນາດັດແກ້ ໃນມູນຄ່າຂອງການດັດແກ້ແຕ່ 10.000.000.000 (ສິບຕື້) ກີບ ລົງມາສຳລັບໂຄງການຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຕາມການສະເໜີຂອງລັດຖະມົນຕີກະຊວງ ຫຼື ຫົວໜ້າອົງການລັດທຽບເທົ່າກະຊວງ; ດັດແກ້ ໃນມູນຄ່າຂອງ ການດັດແກ້ຫຼາຍກ່ວາ 5,000.000.000 (ຫ້າຕື້) ກີບ ຫາ 10.000.000.000 (ສິບຕື້) ກີບ ສຳລັບໂຄງການຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ;

- ສະພາປະຊາຊົນຂັ້ນແຂວງ ພິຈາລະນາດັດແກ້ໃນມູນຄ່າຂອງການດັດແກ້ ແຕ່ 5.000.000.000 (ຫ້າຕື້) ກີບລົງມາ ສຳລັບໂຄງການລົງທຶນຂອງລັດປະເພດ V ຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ.

2. ໂຄງການລົງທຶນຂອງລັດທີ່ສາມາດດັດແກ້ໄດ້ ຕ້ອງມີສາເຫດໃດໜຶ່ງ ດັ່ງນີ້:

- ລາຄາວັດສະດຸກໍ່ສ້າງໃນຕະຫຼາດເພີ່ມຂຶ້ນເກີນກວ່າ ສິບຫ້າສ່ວນຮ້ອຍ (15%) ຂອງລາຄາໃນວັນເຊັນສັນຍາ;

- ການປັບປຸງຄ່າແຮງງານ ຕາມນະໂຍບາຍຂອງລັດຖະບານ ພາຍຫຼັງທີ່ໄດ້ເຊັນສັນຍາ;

- ການເພີ່ມໜ້າວຽກ, ປ່ຽນແປງໂຄງສ້າງ, ປ່ຽນແປງແຜນຜັງເຕັກນິກ, ຖືກຜົນກະທົບຈາກໄພພິບັດທາງທຳມະຊາດ, ເຫດບັງເອີນທີ່ບໍ່ສາມາດຄວບຄຸມໄດ້;

- ການປ່ຽນແປງນະໂຍບາຍ, ແຜນແມ່ບົດ ຫຼື ຄວາມຈຳເປັນທີ່ສົ່ງຜົນສະທ້ອນໂດຍກົງ ຕໍ່ປະສິດທິຜົນຂອງໂຄງການ;

3. ໂຄງການລົງທຶນຂອງລັດທີ່ມີຫຼາຍກິດຈະການ ອາດຈະດັດແກ້ ເປັນແຕ່ລະກິດຈະການຍ່ອຍ ແລະ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ຂອງມາດຕານີ້;

4. ໂຄງການລົງທຶນຂອງລັດ ທີ່ຈະດັດແກ້ມູນຄ່າໂຄງການ ຕ້ອງມີແຫຼ່ງທຶນງົບປະມານຮອງຮັບທີ່ແນ່ນອນ.

ກະຊວງແຜນການ ແລະ ການລົງທຶນ ສັງລວມບັນດາໂຄງການລົງທຶນທີ່ໄດ້ດັດແກ້ແລ້ວ ສະເໜີລັດຖະບານ ເພື່ອລາຍງານໃຫ້ສະພາແຫ່ງຊາດ.

**ມາດຕາ 55 (ປັບປຸງ) ການໂຈະໂຄງການລົງທຶນຂອງລັດ**

ໃນການໂຈະໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການໂຈະໂຄງການລົງທຶນຂອງລັດ ມີ:

- ສະພາແຫ່ງຊາດ ພິຈາລະນາການໂຈະໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປະເພດ I ຕາມການສະເໜີຂອງລັດຖະບານ;

- ລັດຖະບານ ພິຈາລະນາການໂຈະໂຄງການລົງທຶນຂອງລັດປະເພດ II ແລະ III ຕາມການ ສະເໜີຂອງກະຊວງແຜນການ ແລະ ການລົງທຶນ;

- ກະຊວງແຜນການ ແລະ ການລົງທຶນ ພິຈາລະນາການໂຈະໂຄງການລົງທຶນຂອງລັດປະເພດ IV ແລະ V ຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຕາມການສະເໜີຂອງລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ; ໂຈະໂຄງການລົງທຶນຂອງລັດປະເພດ IV ຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

- ສະພາປະຊາຊົນຂັ້ນແຂວງ ພິຈາລະນາການໂຈະໂຄງການລົງທຶນຂອງລັດປະເພດ V ຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

2. ໂຄງການລົງທຶນຂອງລັດ ຈະຖືກໂຈະເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

- ມີປະສິດທິຜົນຕໍ່າ;
- ມີການປ່ຽນແປງນະໂຍບາຍ ຫຼື ແຜນແມ່ບົດ;
- ຂັດກັບແຜນພັດທະນາໂຄງການ;
- ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ສະພາບແວດລ້ອມ-ສັງຄົມ ແລະ ທໍາມະຊາດ;
- ແຕະຕ້ອງປູສະນີຍະສະຖານ ແລະ ວັດຖຸບູຮານ;
- ແກ່ຍາວການປະຕິບັດໂຄງການເກີນກໍານົດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;
- ໃນກໍລະນີງົບປະມານ ຫຼື ທຶນຮອນ ເພື່ອຊໍາລະຫາກບໍ່ພຽງພໍ ກໍສາມາດໂຈະໂຄງການໄວ້ ຊົ່ວຄາວ.

ກະຊວງແຜນການ ແລະ ການລົງທຶນ ສັງລວມບັນດາໂຄງການລົງທຶນທີ່ໄດ້ໂຈະແລ້ວ ສະເໜີລັດຖະບານ ເພື່ອລາຍງານໃຫ້ສະພາແຫ່ງຊາດ.

**ມາດຕາ 56 (ປັບປຸງ) ການອວ່າຍທຶນໂຄງການລົງທຶນຂອງລັດ**

ໃນການອວ່າຍທຶນໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການອວ່າຍທຶນ ໂຄງການລົງທຶນຂອງລັດ ມີ:

- ສະພາແຫ່ງຊາດ ພິຈາລະນາການອວ່າຍທຶນໂຄງການລົງທຶນຂອງລັດ ໃນມູນຄ່າອວ່າຍທຶນຫຼາຍກວ່າ 50.000.000.000 (ຫ້າສິບຕື້) ກີບຂຶ້ນໄປ ຕາມການສະເໜີຂອງລັດຖະບານ;

- ລັດຖະບານ ພິຈາລະນາການອວ່າຍທຶນໂຄງການລົງທຶນຂອງລັດ ໃນມູນຄ່າອວ່າຍທຶນຫຼາຍກວ່າ 10.000.000.000 (ສິບຕື້) ກີບ ຫາ 50.000.000.000 (ຫ້າສິບຕື້)ກີບ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ;

- ກະຊວງແຜນການ ແລະ ການລົງທຶນ ພິຈາລະນາການອວ່າຍທຶນ ໃນມູນຄ່າ 10.000.000.000 (ສິບຕື້) ກີບ ລົງມາ ສໍາລັບໂຄງການຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຕາມການສະເໜີຂອງ

ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ; ອວ່າຍທຶນໃນມູນຄ່າຫຼາຍກວ່າ 5.000.000.000 (ຫ້າຕື້) ກີບ ຫາ 10.000.000.000 (ສິບຕື້) ກີບ ສໍາລັບໂຄງການຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

- ສະພາປະຊາຊົນຂັ້ນແຂວງ ພິຈາລະນາການອວ່າຍທຶນ ໃນມູນຄ່າແຕ່ 5.000.000.000 (ຫ້າຕື້) ກີບ ລົງມາ ສໍາລັບໂຄງການລົງທຶນຂອງລັດປະເພດ V ຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

2. ໂຄງການລົງທຶນຂອງລັດ ຈະຖືກອວ່າຍທຶນເມື່ອ ມີ ສາເຫດໃດໜຶ່ງ ດັ່ງນີ້:

- ເປັນໂຄງການທີ່ຈັດຕັ້ງປະຕິບັດສໍາເລັດແລ້ວ ແຕ່ ງົບປະມານຍັງເຫຼືອສ່ວນໃດສ່ວນໜຶ່ງ;

- ເປັນໂຄງການທີ່ມີການຢັ້ງຢືນແຫຼ່ງທຶນຊໍາລະຈາກ ບຸກຄົນ, ນິຕິບຸກຄົນ ຫຼື ແຫຼ່ງທຶນອື່ນໄດ້ປະກອບສ່ວນ ພາຍຫຼັງທີ່ໂຄງການໄດ້ຮັບອະນຸມັດແລ້ວ;

- ເປັນໂຄງການທີ່ຖືກໂຈະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 55 ຫຼື ຖືກຍົກເລີກ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້.

ໂຄງການທີ່ຈະໄດ້ຮັບງົບປະມານເພີ່ມ ຈາກການອວ່າຍ ຕ້ອງແມ່ນໂຄງການທີ່ຢູ່ໃນແຜນການລົງທຶນຂອງລັດ ແລະ ງົບປະມານທີ່ສະພາແຫ່ງຊາດຮັບຮອງໃນປີນັ້ນ.

ກະຊວງແຜນການ ແລະ ການລົງທຶນ ສັງລວມບັນດາໂຄງການລົງທຶນທີ່ໄດ້ອວ່າຍ ແລ້ວສະເໜີລັດຖະບານ ເພື່ອລາຍງານໃຫ້ສະພາແຫ່ງຊາດ.

**ມາດຕາ 57 (ປັບປຸງ) ການຍົກເລີກໂຄງການລົງທຶນຂອງລັດ**

ໃນການຍົກເລີກໂຄງການລົງທຶນຂອງລັດ ໃຫ້ປະຕິບັດ ດັ່ງນີ້:

1. ອົງການທີ່ມີສິດໃນການຍົກເລີກໂຄງການລົງທຶນຂອງລັດ ມີ:

- ສະພາແຫ່ງຊາດ ພິຈາລະນາການຍົກເລີກໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປະເພດ I ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງລັດຖະບານ;

- ລັດຖະບານ ພິຈາລະນາການຍົກເລີກໂຄງການລົງທຶນຂອງລັດ ປະເພດ II ແລະ III ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ;

- ກະຊວງແຜນການ ແລະ ການລົງທຶນ ພິຈາລະນາການຍົກເລີກໂຄງການລົງທຶນຂອງລັດ ປະເພດ IV ແລະ V ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຕາມການສະເໜີຂອງລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ; ຍົກເລີກໂຄງການລົງທຶນຂອງລັດປະເພດ IV ຂອງອົງການປົກຄອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

- ສະພາປະຊາຊົນຂັ້ນແຂວງ ພິຈາລະນາການຍົກເລີກໂຄງການລົງທຶນຂອງລັດປະເພດ V ຂອງອົງການປົກຄອງທ້ອງຖິ່ນຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

2. ໂຄງການລົງທຶນຂອງລັດ ຈະຖືກຍົກເລີກ ເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

- ມີຄວາມຈຳເປັນທີ່ຕ້ອງປົກປ້ອງຜົນປະໂຫຍດລວມຂອງລັດ, ລວມໝູ່ ແລະ ປະຊາຊົນ ທີ່ຖືກກະທົບຈາກໂຄງການ;

- ບໍ່ມີປະສິດທິຜົນ;

- ມີເຫດສຸດວິໄສ ເຮັດໃຫ້ໂຄງການບໍ່ສາມາດດຳເນີນຕໍ່ໄປໄດ້;

- ທຳລາຍສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຢ່າງຮ້າຍແຮງ, ແຕະຕ້ອງປູຊະນີຍະສະຖານ ຫຼື ວັດຖຸບູຮານ ຫຼື ໃນເຂດ ປ່າສະຫງວນ, ປ່າປ້ອງກັນ; ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໂຮງຮຽນ, ໂຮງໝໍ;

- ດຳເນີນບໍ່ຖືກຕາມມາດຕະຖານເຕັກນິກ ແລະ ລະບຽບການດ້ານຄວາມປອດໄພ;

- ມີການປ່ຽນແປງນະໂຍບາຍ ຫຼື ແຜນແມ່ບົດ;

- ບໍ່ສອດຄ່ອງກັບແຜນພັດທະນາໂຄງການ;

- ບໍ່ສອດຄ່ອງກັບຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກະຊວງແຜນການ ແລະ ການລົງທຶນ ສັງລວມບັນດາໂຄງການທີ່ຖືກຍົກເລີກ ແລ້ວສະເໜີຕໍ່ລັດຖະບານ ເພື່ອລາຍງານຕໍ່ສະພາແຫ່ງຊາດ.

## ໝວດທີ 5
## ສິດ ແລະ ໜ້າທີ່ ຂອງຜູ້ປະຕິບັດໂຄງການລົງທຶນຂອງລັດ

### ມາດຕາ 58 (ປັບປຸງ) ຜູ້ປະຕິບັດໂຄງການລົງທຶນຂອງລັດ

ຜູ້ປະຕິບັດໂຄງການລົງທຶນຂອງລັດ ມີ ດັ່ງນີ້:

1. ເຈົ້າຂອງໂຄງການ;
2. ຄະນະຮັບຜິດຊອບໂຄງການ;
3. ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ;
4. ທີ່ປຶກສາໂຄງການ;
5. ຜູ້ຮັບເໝົາໂຄງການ;
6. ຜູ້ສຳຫຼວດ ອອກແບບ.

**ມາດຕາ 59 ສິດ ແລະ ໜ້າທີ່ຂອງເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕົກລົງກະກຽມໂຄງການລົງທຶນຂອງລັດ;

2. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການ;

3. ປະເມີນຜົນ ບັນດາໂຄງການລົງທຶນຂອງລັດ ທີ່ຂຶ້ນກັບຂອບເຂດສິດຂອງຕົນ;

4. ຮັບຮອງແຜນການປະມູນ, ເອກະສານການປະມູນ, ຜົນຂອງການປະມູນ;

5. ຊີ້ນຳຄະນະຮັບຜິດຊອບໂຄງການ ປະຕິບັດໂຄງການລົງທຶນຂອງລັດ ໄປຕາມແຜນດຳເນີນງານ, ຮັບປະກັນຄຸນນະພາບ ແລະ ລາຍຈ່າຍການລົງທຶນຕາມທີ່ໄດ້ຮັບຮອງ;

6. ນຳສະເໜີກ່ຽວກັບການດັດແກ້, ໂຈະ, ອວ່າຍທຶນ ແລະ ຍົກເລີກ ໂຄງການລົງທຶນຂອງລັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54, 55, 56 ແລະ 57 ຂອງກົດໝາຍສະບັບນີ້;

7. ຈັດຕັ້ງການຕິດຕາມ, ກວດກາການເຄື່ອນໄຫວຂອງຄະນະຮັບຜິດຊອບໂຄງການ ໃນໄລຍະການປະຕິບັດໂຄງການລົງທຶນຂອງລັດ;

8. ຊຳລະມູນຄ່າໂຄງການທີ່ໄດ້ເຮັດສຳເລັດໃຫ້ແກ່ຜູ້ຮັບເໝົາ;

9. ຍົກເລີກສັນຍາກັບຜູ້ຮັບເໝົາ ໃນກໍລະນີທີ່ຜູ້ຮັບເໝົາບໍ່ປະຕິບັດຕາມສັນຍາ;

10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບໂຄງການ**

ຄະນະຮັບຜິດຊອບໂຄງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳໃຊ້ແຫຼ່ງທຶນຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອຈັດຕັ້ງປະຕິບັດໂຄງການ ໂດຍໄດ້ຮັບການເຫັນດີຈາກເຈົ້າຂອງໂຄງການ;

2. ປະສານສົມທົບກັບອົງການຈັດຕັ້ງຕ່າງໆຂອງລັດ ແລະ ສະໜອງບັນດາຂໍ້ມູນທີ່ກ່ຽວຂ້ອງ ໃຫ້ທີ່ປຶກສາ, ຜູ້ຮັບເໝົາ, ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ;

3. ດຳເນີນການຄັດເລືອກທີ່ປຶກສາ, ຈັດຕັ້ງປະມູນໂຄງການ, ເຈລະຈາ ແລະ ເຮັດສັນຍາກັບທີ່ປຶກສາ ແລະ ຜູ້ຮັບເໝົາ ໂຄງການ;

4. ຕິດຕາມ, ກວດກາ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນໃນຂະບວນການປະຕິບັດໂຄງການລົງທຶນຂອງລັດ;

5. ລາຍງານສະພາບການປະຕິບັດໂຄງການ ແຕ່ລະໄລຍະ ໃຫ້ເຈົ້າຂອງໂຄງການຢ່າງເປັນປະຈຳພ້ອມທັງສະເໜີບັນດາກົນໄກ, ມາດຕະການ ແລະ ວິທີການ ເພື່ອຮັບປະກັນການປະຕິບັດໂຄງການຕາມກຳນົດເວລາ, ມີຄຸນນະພາບ ແລະ ປະຢັດລາຍຈ່າຍງົບປະມານການລົງທຶນທີ່ໄດ້ຮັບຮອງເອົາ;

6. ສະເໜີຍົກເລີກສັນຍາກັບທີ່ປຶກສາ ຫຼື ຜູ້ຮັບເໝົາ ໂຄງການໃນກໍລະນີທີ່ປຶກສາ ຫຼື ຜູ້ຮັບເໝົາ ນັ້ນ ລະເມີດສັນຍາ ຊຶ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜົນປະໂຫຍດລວມຂອງຊາດ;

7. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 61 ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງ ແລະ ນໍາໃຊ້ໂຄງການ**

ຜູ້ຄຸ້ມຄອງ ແລະ ນໍາໃຊ້ໂຄງການ ມີ ສິດ ແລະ ໜ້າທີ່ໃນການບໍລິຫານ, ຄຸ້ມຄອງ ແລະ ນໍາໃຊ້ໝາກຜົນ ຂອງໂຄງການລົງທຶນຂອງລັດ ຕາມການມອບໝາຍຂອງເຈົ້າຂອງໂຄງການ.

**ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ຂອງທີ່ປຶກສາໂຄງການ**

ທີ່ປຶກສາໂຄງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີຄະນະຮັບຜິດຊອບໂຄງການສະໜອງຂໍ້ມູນ, ເອກະສານ, ລະບຽບການທີ່ກ່ຽວຂ້ອງກັບ ໜ້າທີ່ ທີ່ໄດ້ຮັບມອບໝາຍ;

2. ປະຕິເສດວຽກງານທີ່ບໍ່ໄດ້ກໍານົດໄວ້ໃນສັນຍາ ຫຼື ຂັດກັບກົດໝາຍ ແລະ ລະບຽບການ;

3. ໃຫ້ຄໍາແນະນໍາທາງດ້ານວິຊາການ, ເຕັກນິກ ກ່ຽວກັບໂຄງການທີ່ຕົນຮັບຜິດຊອບ;

4. ຕິດຕາມ, ກວດກາ ການປະຕິບັດໂຄງການ ຢ່າງເປັນປະຈໍາ;

5. ລາຍງານຜົນຂອງການປະຕິບັດໂຄງການໃຫ້ຄະນະຮັບຜິດຊອບໂຄງການ ຢ່າງເປັນປົກກະຕິ;

6. ຮັບເງິນຄ່າບໍລິການຕາມສັນຍາ;

7. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 63 (ປັບປຸງ) ສິດ ແລະ ໜ້າທີ່ຂອງຜູ້ຮັບເໝົາໂຄງການ**

ຜູ້ຮັບເໝົາໂຄງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດໂຄງການໃຫ້ສໍາເລັດຕາມມາດຕະຖານເຕັກນິກ ແລະ ກໍານົດເວລາໃນສັນຍາ;

2. ຮັບເງິນຄ່າໂຄງການທີ່ຕົນໄດ້ປະຕິບັດສໍາເລັດຈາກເຈົ້າຂອງໂຄງການ ຕາມສັນຍາ;

3. ປະຕິເສດຄໍາແນະນໍາຂອງເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ ຫຼື ທີ່ປຶກສາໂຄງ ການທີ່ບໍ່ຖືກກັບມາດຕະຖານເຕັກນິກ ຊຶ່ງຈະເຮັດໃຫ້ໂຄງການນັ້ນບໍ່ມີຄຸນນະພາບ;

4. ປົກປັກຮັກສາ ພາຫະນະ, ວັດຖຸປະກອນ ແລະ ວັດສະດຸກໍ່ສ້າງຕ່າງໆຂອງໂຄງການ ທີ່ເຈົ້າຂອງ ໂຄງການຈັດຫາໃຫ້;

5. ຄໍ້າປະກັນສັນຍາ ແລະ ຄໍ້າປະກັນໂຄງການ;

6. ກໍ່ສ້າງ ຫຼື ສ້ອມແປງໂຄງການຄືນໃໝ່ດ້ວຍທຶນຂອງຕົນເອງ ໃນກໍລະນີທີ່ໂຄງການນັ້ນ ຫາກເປ່ ເພ ຫຼື ບໍ່ໄດ້ມາດຕະຖານເຕັກນິກໃນໄລຍະເວລາຄໍ້າປະກັນ;

7. ຖອນເງິນຄໍ້າປະກັນໂຄງການດັ່ງກ່າວ ພາຍຫຼັງທີ່ສິ້ນສຸດໄລຍະເວລາຄໍ້າປະກັນຕາມທີ່ໄດ້ກໍານົດໄວ້ໃນສັນຍາ ຫຼື ຕາມກົດໝາຍ;

8. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນເນື່ອງຈາກໂຄງການທີ່ຕົນສ້າງນັ້ນ ບໍ່ໄດ້ຕາມມາດຕະຖານເຕັກນິກ ເວັ້ນເສຍແຕ່ຄວາມເສຍຫາຍນັ້ນຫາກເກີດຂຶ້ນຍ້ອນເຫດສຸດວິໄສ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 64 (ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ສໍາຫຼວດ ອອກແບບ**

ຜູ້ສໍາຫຼວດ ອອກແບບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ເນື່ອງຈາກໂຄງການທີ່ຕົນສໍາຫຼວດ ອອກແບບ ບໍ່ໄດ້ມາດຕະຖານເຕັກນິກ ຫຼື ຄິດໄລ່ບໍລິມາດວຽກຜິດພາດ;

2. ຮັບຜິດຊອບຕໍ່ເອກະສານອອກແບບຂອງຕົນ ທີ່ມອບໃຫ້ເຈົ້າຂອງໂຄງການ;

3. ສະໜອງຂໍ້ມູນ, ເອກະສານ, ແບບກໍ່ສ້າງພ້ອມດ້ວຍໃບປະເມີນລາຄາການກໍ່ສ້າງໃຫ້ເຈົ້າຂອງໂຄງການ;

4. ອະທິບາຍເອກະສານຕ່າງໆ ແລະ ແບບໂຄງການທີ່ພົວພັນກັບການສໍາຫຼວດ ອອກແບບ ທີ່ຕົນຮັບຜິດຊອບໃຫ້ເຈົ້າຂອງໂຄງການ, ທີ່ປຶກສາ ແລະ ຜູ້ຮັບເໝົາ ໂຄງການ;

5. ປະຕິເສດຄໍາແນະນໍາ ຫຼື ຄໍາສະເໜີຂໍປ່ຽນແບບກໍ່ສ້າງ, ວັດສະດຸກໍ່ສ້າງ ຫຼື ມາດຕະຖານເຕັກນິກຂອງໂຄງການທີ່ບໍ່ຖືກຕ້ອງຕາມຫຼັກວິຊາການ ຫຼື ມາດຕະຖານເຕັກນິກ ຊຶ່ງຈະເຮັດໃຫ້ໂຄງການບໍ່ມີຄຸນນະພາບ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການກວດກາ, ກວດການ ແລະ ລາຍງານການຈັດຕັ້ງປະຕິບັດ ແຜນການລົງທຶນຂອງລັດ

**ມາດຕາ 65 ອົງການຮັບຜິດຊອບລາຍງານການປະຕິບັດແຜນການລົງທຶນຂອງລັດ**

ອົງການຮັບຜິດຊອບລາຍງານການປະຕິບັດແຜນການລົງທຶນຂອງລັດ ມີ ດັ່ງນີ້:

1. ລັດຖະບານ;

2. ກະຊວງແຜນການ ແລະ ການລົງທຶນ;

3. ກະຊວງການເງິນ;

4. ກະຊວງ, ອົງການລັດທຽບເທົ່າກະຊວງ;

5. ອົງການປົກຄອງທ້ອງຖິ່ນ.

**ມາດຕາ 66 ລັດຖະບານ**

ລັດຖະບານ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ຕໍ່ກອງປະຊຸມສະພາແຫ່ງຊາດ.

**ມາດຕາ 67 ກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ສະຫຼຸບ, ສັງລວມ, ຕີລາຄາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດໃຫ້ລັດຖະບານຢ່າງເປັນປົກກະຕິ.

**ມາດຕາ 68 (ປັບປຸງ) ກະຊວງການເງິນ**

ກະຊວງການເງິນ ສະຫຼຸບ, ສັງລວມ ສະພາບການຈັດຕັ້ງປະຕິບັດແຜນການນຳໃຊ້ງົບປະມານ ເຂົ້າໃນການລົງທຶນຂອງລັດ ເປັນແຕ່ລະງວດ ແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ 20 ຂອງເດືອນທຳອິດຂອງງວດຖັດໄປ ພ້ອມທັງລາຍງານໃຫ້ລັດຖະບານຢ່າງເປັນປົກກະຕິ.

**ມາດຕາ 69 (ປັບປຸງ) ກະຊວງ, ອົງການລັດທຽບເທົ່າກະຊວງ**

ກະຊວງ, ອົງການລັດທຽບເທົ່າກະຊວງ ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດໃນຂອບເຂດທີ່ຕົນຮັບຜິດຊອບ ເປັນແຕ່ລະງວດ ແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ່ 20 ຂອງເດືອນທຳອິດຂອງງວດຖັດໄປຢ່າງເປັນປົກກະຕິ.

**ມາດຕາ 70 (ປັບປຸງ) ອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດໃນຂອບເຂດທີ່ຕົນຮັບຜິດຊອບ ໃຫ້ສະພາປະຊາຊົນຂັ້ນແຂວງ, ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການລັດທຽບເທົ່າກະຊວງ ເປັນແຕ່ລະງວດ ພາຍຫຼັງທີ່ໄດ້ປະສານສົມທົບກັບຂະແໜງການຂັ້ນຂອງຕົນ ພ້ອມກັບຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ໄດ້ມອບໝາຍໃຫ້.

## ໝວດທີ 7
## ການມອບຮັບ ແລະ ນຳໃຊ້ໂຄງການລົງທຶນຂອງລັດ

**ມາດຕາ 71 ການມອບຮັບໂຄງການ**

ເມື່ອໂຄງການປະຕິບັດສຳເລັດແລ້ວ ກ່ອນການມອບຮັບຢ່າງເປັນທາງການນັ້ນ ຕ້ອງໄດ້ມີການກວດກາ ທາງດ້ານມາດຕະຖານເຕັກນິກ, ປະລິມານ, ຄຸນນະພາບ ທີ່ໄດ້ກຳນົດໄວ້ໃນເອກະສານໂຄງການ ແລະ ສັນຍາ ພ້ອມທັງດຳເນີນການປະເມີນຜົນໂຄງການ, ແນະນຳການນຳໃຊ້ ຫຼື ມີການທົດລອງນຳໃຊ້ໃນໄລຍະໜຶ່ງ ສຳລັບບາງໂຄງການ.

**ມາດຕາ 72 ການຊຳລະມູນຄ່າໂຄງການລົງທຶນຂອງລັດ**

ພາຍຫຼັງທີ່ໂຄງການໄດ້ປະຕິບັດສຳເລັດ, ມີການກວດກາຢັ້ງຢືນທາງດ້ານມາດຕະຖານເຕັກນິກ ແລະ ຄຸນນະພາບຂອງໂຄງການຄົບຖ້ວນແລ້ວ ຕ້ອງຊຳລະມູນຄ່າໂຄງການນັ້ນ ຕາມສັນຍາ ແລະ ລະບຽບການເບີກຈ່າຍ.

**ມາດຕາ 73 (ປັບປຸງ) ການນຳໃຊ້ໂຄງການ ແລະ ການປະເມີນຜົນຫຼັງການນຳໃຊ້**

ເຈົ້າຂອງໂຄງການ ຕ້ອງມອບໂຄງການໃຫ້ ຜູ້ຄຸ້ມຄອງ ແລະ ນຳໃຊ້ ເພື່ອນຳໃຊ້ໃຫ້ສອດຄ່ອງກັບວັດຖຸປະສົງຂອງໂຄງການ.

ສຳລັບໂຄງການລົງທຶນຂອງລັດປະເພດ I, II, III ແລະ IV ພາຍຫຼັງນຳໃຊ້ໄດ້ ສອງ ຫາ ຫ້າປີ ຕ້ອງໄດ້ປະເມີນຜົນ ເພື່ອຖອດຖອນບົດຮຽນ ແລະ ປັບປຸງການສ້າງໂຄງການລົງທຶນຂອງລັດໃນອະນາຄົດ.

ເນື້ອໃນການປະເມີນຜົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້.

**ມາດຕາ 74 ການບູລະນະຮັກສາໂຄງການ**

ການບູລະນະຮັກສາໂຄງການລົງທຶນຂອງລັດ ແມ່ນ ພັນທະຂອງທົ່ວສັງຄົມ, ຂອງຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການໃນການປົກປັກຮັກສາໂຄງການນັ້ນໃຫ້ຍືນຍົງ ແລະ ຮັບໃຊ້ຜົນປະໂຫຍດລວມຢ່າງຍາວນານ.

## ພາກທີ III
## ຂໍ້ຫ້າມ

**ມາດຕາ 75 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ປະຕິບັດໂຄງການລົງທຶນນອກແຜນ ເວັ້ນເສຍແຕ່ກໍລະນີເຫດສຸດວິໄສ ແຕ່ຕ້ອງໄດ້ສະເໜີລັດຖະບານພິຈາລະນາ ເພື່ອຂໍອະນຸມັດຈາກສະພາແຫ່ງຊາດ;

2. ປະຕິບັດໂຄງການລົງທຶນເກີນມູນຄ່າ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ, ໃນກໍລະນີຈຳເປັນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງກົດໝາຍສະບັບນີ້;

3. ປະຕິບັດໂຄງການລົງທຶນເກີນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;

4. ເອົາໂຄງການລົງທຶນຂອງລັດທີ່ບໍ່ໄດ້ຜ່ານການປະເມີນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງ ກົດໝາຍສະບັບນີ້ ເຂົ້າໃນແຜນການລົງທຶນຂອງລັດ;

5. ດຳເນີນການປະມູນໂຄງການລົງທຶນຂອງລັດທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ບັນຈຸໂຄງການຊ່ວຍເຫຼືອທາງການ ເພື່ອການພັດທະນາທີ່ຍັງບໍ່ທັນມີການຢັ້ງຢືນແຫຼ່ງທຶນທີ່ແນ່ນອນເຂົ້າໃນແຜນການລົງທຶນຂອງລັດ;

7. ຮັບ ແລະ ໃຫ້ສິນບົນ, ບັງຄັບນາບຂູ່, ຕົວະຍົວະຫຼອກຫຼວງ, ແອບອ້າງຊື່ຂອງຜູ້ມີສິດອຳນາດ ໃນການເຄື່ອນໄຫວລົງທຶນຂອງລັດ ເພື່ອຜົນປະໂຫຍດສ່ວນຕົວ ເປັນຕົ້ນ ແມ່ນການປະມູນໂຄງການ;

8. ເຂົ້າແຊກແຊງໃນຂະບວນການລົງທຶນຂອງລັດ ທີ່ຕົນບໍ່ມີຄວາມຮັບຜິດຊອບ ໂດຍກົງຕໍ່ການຄຸ້ມຄອງໂຄງການລົງທຶນຂອງລັດ;

9. ນຳໃຊ້ຊັບພະຍາກອນທຳມະຊາດ, ຊັບສິນ ແລະ ຊັບສິນທາງປັນຍາຂອງລັດຊຳລະໂຄງການໂດຍກົງທີ່ບໍ່ຜ່ານລະບົບງົບປະມານ;

10. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 76 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າຂອງໂຄງການ**

ຫ້າມ ເຈົ້າຂອງໂຄງການ ມີ ພຶດຕິກຳ ດັ່ງນີ້:

1. ຕົກລົງຮັບຮອງເອົາໂຄງການລົງທຶນທີ່ບໍ່ມີປະສິດທິຜົນ ແລະ ອາດກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ລວມໝູ່ ແລະ ບຸກຄົນ;

2. ກົດໜ່ວງ, ແກ່ຍາວຂັ້ນຕອນການປະຕິບັດໂຄງການລົງທຶນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

3. ອວ່າຍທຶນຈາກໂຄງການລົງທຶນຂອງລັດ ທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ ໄປໃສ່ໂຄງການທີ່ບໍ່ຢູ່ໃນແຜນການລົງທຶນຂອງລັດ;

4. ເພີ່ມບໍລິມາດວຽກຂອງໂຄງການໂດຍພາລະການ;

5. ອະນຸຍາດໃຫ້ທີ່ປຶກສາ ແລະ ຜູ້ຮັບເໝົາ ໂຄງການດັດແປງບັນດາມາດຕະຖານເຕັກນິກໂຄງການ ໂດຍບໍ່ໄດ້ຮັບການເຫັນດີຈາກອົງການວິຊາການທີ່ກ່ຽວຂ້ອງ;

6. ແບ່ງໂຄງການອອກເປັນໂຄງການຍ່ອຍ ເພື່ອໃຫ້ມູນຄ່າໂຄງການຕ່ຳລົງ ໂດຍບໍ່ສອດຄ່ອງກັບບົດສະເໜີໂຄງການ ເພື່ອເອົາເຂົ້າແຜນການລົງທຶນຂອງລັດ ປະຈຳປີ;

7. ຮັບ ຫຼື ໃຫ້ສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ແກ້ໄຂບັນຫາ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 77 (ປັບປຸງ) ຂໍ້ຫ້າມສຳລັບຄະນະຮັບຜິດຊອບໂຄງການ

ຫ້າມ ຄະນະຮັບຜິດຊອບໂຄງການ ມີ ພຶດຕິກຳ ດັ່ງນີ້:

1. ກົດໜ່ວງ ແກ່ຍາວການປະຕິບັດໂຄງການ ຊຶ່ງຈະສົ່ງຜົນສະທ້ອນຕໍ່ຄຸນນະພາບຂອງໂຄງການ ແລະ ເຮັດໃຫ້ລາຍຈ່າຍການລົງທຶນເພີ່ມຂຶ້ນໂດຍບໍ່ມີເຫດຜົນ;

2. ຮັບ ຫຼື ໃຫ້ສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ແກ້ໄຂບັນຫາ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

3. ປະຕິບັດໜ້າທີ່ເກີນຂອບເຂດສິດຂອງຕົນ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 78 (ປັບປຸງ) ຂໍ້ຫ້າມສຳລັບຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ

ຫ້າມ ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ ມີ ພຶດຕິກຳ ດັ່ງນີ້:

1. ປ່ຽນເປົ້າໝາຍການນຳໃຊ້ໂຄງການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

2. ນຳເອົາຊັບສິນຂອງໂຄງການ ໄປຂາຍ, ຊວດຈຳ, ຄ້ຳປະກັນ ຫຼື ດຳເນີນການໃດໜຶ່ງທີ່ຂັດກັບລະບຽບການຄຸ້ມຄອງຊັບສິນຂອງລັດ;

3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 79 (ປັບປຸງ) ຂໍ້ຫ້າມສຳລັບທີ່ປຶກສາໂຄງການ

ຫ້າມ ທີ່ປຶກສາໂຄງການ ມີ ພຶດຕິກຳ ດັ່ງນີ້:

1. ຫຼົບຫຼີກໃນການໃຫ້ຄຳປຶກສາ ຫຼື ຄຳແນະນຳທາງດ້ານວິຊາການ, ບໍລິຫານໂຄງການລົງທຶນຂອງລັດ;

2. ໃຫ້ຄຳປຶກສາທີ່ບິດເບືອນ, ບໍ່ຖືກຕ້ອງຕາມຄວາມຈິງ;

3. ເມີນເສີຍໃນການຄຸ້ມຄອງການປະຕິບັດໂຄງການລົງທຶນຂອງລັດ;

4. ດັດແປງບັນດາມາດຕະຖານເຕັກນິກ, ເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງໂຄງການ;

5. ສົມຮູ້ຮ່ວມຄິດກັບເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການ ຫຼື ຜູ້ຮັບເໝົາໂຄງການ ເພື່ອຫາຜົນປະໂຫຍດທີ່ບໍ່ຊອບທຳ;

6. ສະໜອງຂໍ້ມູນທາງດ້ານການເງິນ ແລະ ເຕັກນິກ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ;

7. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;

8. ຂາຍໂຄງການທີ່ຕົນປະມູນໄດ້ໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

9. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 80 (ໃໝ່) ຂໍ້ຫ້າມສຳລັບຜູ້ຮັບເໝົາໂຄງການ**

ຫ້າມ ຜູ້ຮັບເໝົາໂຄງການ ມີ ພຶດຕິກຳ ດັ່ງນີ້:

1. ເມີນເສີຍໃນການຄຸ້ມຄອງການປະຕິບັດໂຄງການລົງທຶນຂອງລັດ;

2. ດັດແປງບັນດາມາດຕະຖານເຕັກນິກ, ເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

3. ສົມຮູ້ຮ່ວມຄິດກັບເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການ ຫຼື ທີ່ປຶກສາໂຄງການ ເພື່ອຫາຜົນປະໂຫຍດທີ່ບໍ່ຊອບທຳ;

4. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;

5. ຂາຍໂຄງການທີ່ຕົນປະມູນໄດ້ໃຫ້ຜູ້ອື່ນ;

6. ຮັບ ຫຼື ໃຫ້ສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ແກ້ໄຂບັນຫາ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ IV
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 81 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຂອງລັດ ດຳເນີນດ້ວຍຮູບການ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;

2. ການແກ້ໄຂທາງບໍລິຫານ;

3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຮ້ອງຟ້ອງຕໍ່ສານປະຊາຊົນ.

**ມາດຕາ 82 ການປະນີປະນອມ ຫຼື ການໄກ່ເກ່ຍ**

ຖ້າຂໍ້ຂັດແຍ່ງຫາກເກີດຂຶ້ນ ຊຶ່ງມີສ່ວນພົວພັນກັບການລົງທຶນຂອງລັດແລ້ວ ຄູ່ກໍລະນີຕ້ອງພະຍາຍາມແກ້ໄຂຂໍ້ຂັດແຍ່ງນັ້ນດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດນຳກັນ.

**ມາດຕາ 83 ການແກ້ໄຂທາງບໍລິຫານ**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະບໍລິຫານ ກ່ຽວກັບການລົງທຶນຂອງລັດ ເຊັ່ນ ບຸກຄົນ ແລະ ນິຕິບຸກຄົນທີ່ເຄື່ອນໄຫວລົງທຶນໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍໃຫ້ຂະແໜງການແຜນ

ການ ແລະ ການລົງທຶນ ປະສານສົມທົບກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນເປັນຜູ້ແກ້ໄຂ. ໃນກໍລະນີຫາກບໍ່ສາມາດແກ້ໄຂໄດ້ນັ້ນ ກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດຕົນ ເປັນຜູ້ແກ້ໄຂ.

**ມາດຕາ 84 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ເມື່ອຄູ່ກໍລະນີບໍ່ສາມາດປະນີປະນອມກັນ ຫຼື ໄກ່ເກ່ຍກັນຢູ່ຂະແໜງການແຜນການ ແລະ ການລົງທຶນ ໄດ້ກໍມີສິດຮ້ອງຂໍໃຫ້ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແກ້ໄຂ ຕາມກົດໝາຍ ແລະ ລະບຽບການ ບົນພື້ນຖານການເຫັນດີນຳກັນ.

**ມາດຕາ 85 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ເມື່ອຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນບໍ່ໄດ້ຮັບຄວາມຍຸຕິທຳ ຫຼື ໄດ້ຮັບຄວາມເສຍຫາຍເນື່ອງຈາກການລົງທຶນຂອງລັດໃນໂຄງການໃດໜຶ່ງແລ້ວ ກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອທຳການພິຈາລະນາຕັດສີນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 86 ຄວາມຮັບຜິດຊອບໃນໄລຍະລໍຖ້າການແກ້ໄຂ**

ໃນໄລຍະລໍຖ້າການແກ້ໄຂຂໍ້ຂັດແຍ່ງນັ້ນ ບັນດາການຈັດຕັ້ງ, ບຸກຄົນທີ່ກ່ຽວຂ້ອງກັບການເຄື່ອນໄຫວການລົງທຶນຂອງລັດ ຕ້ອງສືບຕໍ່ປະຕິບັດໜ້າທີ່ຂອງຕົນຕາມການຕົກລົງຂອງຂະແໜງການ ຫຼື ອົງການທີ່ກ່ຽວຂ້ອງ ກັບການລົງທຶນຂອງລັດ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາ
### ໝວດທີ 1
### ການຄຸ້ມຄອງການລົງທຶນຂອງລັດ

**ມາດຕາ 87 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານການລົງທຶນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານການລົງທຶນ ປະກອບດ້ວຍ:

1. ກະຊວງແຜນການ ແລະ ການລົງທຶນ;
2. ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ;
3. ຫ້ອງການແຜນການເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

**ມາດຕາ 88 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງການລົງທຶນຂອງລັດ ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານໃນການຜັນຂະຫຍາຍແນວທາງ, ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆ ກ່ຽວກັບການລົງທຶນຂອງລັດໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ສ້າງກົດໝາຍ ແລະ ລະບຽບການ;

2. ຊີ້ນໍາ, ຕິດຕາມ, ກວດກາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານວິຊາສະເພາະຂອງຂະແໜງການແຜນການ ແລະ ການລົງທຶນ ເປັນຕົ້ນ ການສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການລົງທຶນຂອງລັດ, ກົດໝາຍ ແລະ ລະບຽບການກ່ຽວກັບການ ລົງທຶນຂອງລັດ;

3. ຄົ້ນຄວ້າ, ວິໄຈຂໍ້ມູນ ຂ່າວສານ ເພື່ອສະໜອງໃຫ້ແກ່ການຕັດສິນໃຈໃນການລົງທຶນຂອງລັດ;

4. ບໍ່ພິຈາລະນາໂຄງການລົງທຶນຂອງລັດທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນສະເໜີມາ ທີ່ບໍ່ສອດຄ່ອງກັບມາດຕາ 19, 33, 34 ແລະ 35 ຂອງກົດໝາຍສະບັບນີ້;

5. ສ້າງ, ບໍາລຸງ, ຍົກລະດັບພະນັກງານຄຸ້ມຄອງການລົງທຶນຂອງລັດ;

6. ປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ;

7. ພົວພັນຮ່ວມມືກັບຕ່າງປະເທດ ເພື່ອລະດົມ ແລະ ຍາດແຍ່ງການຊ່ວຍເຫຼືອ;

8. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ຕໍ່ ລັດຖະບານຢ່າງປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 89 ສິດ ແລະ ໜ້າທີ່ຂອງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງການລົງທຶນຂອງລັດ ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ມະຕິ, ຄໍາສັ່ງ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງການລົງທຶນຂອງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນແຜນການ ແລະ ແຜນງານລະອຽດ ເພື່ອຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຂອງລັດ;

3. ຊີ້ນໍາ, ຕິດຕາມ, ກວດກາ ພະແນກການ ແລະ ທ້ອງຖິ່ນ ກ່ຽວກັບວຽກງານວິຊາສະເພາະ ຂອງ

ຂະແໜງການແຜນການ ແລະ ການລົງທຶນ ເປັນຕົ້ນ ການສ້າງ ແລະ ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ພ້ອມທັງເຂົ້າຮ່ວມການປະມູນໂຄງການລົງທຶນທີ່ຕັ້ງຢູ່ ແຂວງ, ນະຄອນຫຼວງ;

4. ບໍ່ພິຈາລະນາໂຄງການລົງທຶນຂອງລັດທີ່ ພະແນກການ, ອົງການລັດທຽບເທົ່າພະແນກ, ເມືອງ, ເທດສະບານ, ນະຄອນ ສະເໜີມາ ທີ່ບໍ່ສອດຄ່ອງກັບມາດຕາ 19, 33, 34 ແລະ 35 ຂອງກົດໝາຍສະບັບນີ້;

5. ເປັນເສນາທິການໃນການຄົ້ນຄວ້າ ມີຄໍາເຫັນກ່ຽວກັບການລົງທຶນຂອງລັດໃນໂຄງການຕ່າງໆ ເພື່ອໃຫ້ອົງການປົກຄອງແຂວງ, ນະຄອນຫຼວງ ຫຼື ກະຊວງແຜນການ ແລະ ການລົງທຶນ ພິຈາລະນາ ຕາມແຕ່ລະກໍລະນີ;

6. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງຢູ່ພາຍໃນແຂວງ, ນະຄອນຫຼວງ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງກະຊວງແຜນການ ແລະ ການລົງທຶນ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ;

8. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດພາຍໃນແຂວງ, ນະຄອນຫຼວງ ໃຫ້ອົງການປົກຄອງແຂວງ, ນະຄອນຫຼວງ, ກະຊວງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ;

9. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງກະຊວງແຜນການ ແລະ ການລົງທຶນ.

**ມາດຕາ 90 ສິດ ແລະ ໜ້າທີ່ຂອງຫ້ອງການແຜນການເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງການລົງທຶນຂອງລັດ ຫ້ອງການແຜນການເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດບັນດາແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການກ່ຽວກັບການລົງທຶນຂອງລັດ;

2. ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຂອງລັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຊຸກຍູ້, ຕິດຕາມ ການປະຕິບັດວຽກງານກ່ຽວກັບການລົງທຶນຂອງລັດໃນຂອບເຂດທ້ອງຖິ່ນຂອງຕົນ;

4. ປຸກລະດົມປະຊາຊົນ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ໂຄງການລົງທຶນຂອງລັດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ;

5. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດການລົງທຶນຂອງລັດ ພາຍໃນເມືອງ, ເທດສະບານ,

ນະຄອນ ໃຫ້ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 91 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງການລົງທຶນຂອງລັດ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມຕິດຕາມ, ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃນຂອບເຂດພື້ນທີ່ຕົນຮັບຜິດຊອບ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ;

2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 92 ຄວາມຮັບຜິດຊອບຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການຄຸ້ມຄອງການລົງທຶນຂອງລັດ ນອກຈາກປະຕິບັດ ຕາມກົດໝາຍສະບັບນີ້ແລ້ວ ຍັງຕ້ອງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາການລົງທຶນຂອງລັດ

**ມາດຕາ 93 (ປັບປຸງ) ອົງການກວດກາການລົງທຶນຂອງລັດ**

ອົງການກວດກາການລົງທຶນຂອງລັດ ມີ ສອງພາກສ່ວນ ຄື:

1. ອົງການກວດກາພາຍໃນ ຊຶ່ງປະກອບດ້ວຍ ຂະແໜງການແຜນການ ແລະ ການລົງທຶນ, ການເງິນ ແລະ ຂະແໜງການວິຊາການອື່ນ ທີ່ກ່ຽວຂ້ອງ;

2. ອົງການກວດກາພາຍນອກ ຊຶ່ງປະກອບດ້ວຍ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ອົງການກວດສອບແຫ່ງລັດ, ອົງການກວດກາລັດ, ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ.

**ມາດຕາ 94 ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຂະແໜງການແຜນການ ແລະ ການລົງທຶນ ກວດກາບັນດາໂຄງການທີ່ໄດ້ຮັບອະນຸມັດແລ້ວ

ນັ້ນ ໄດ້ຈັດຕັ້ງປະຕິບັດຖືກກັບເປົ້າໝາຍ, ລະບຽບການ ແລະ ບົດວິພາກເສດຖະກິດ ຫຼື ບົດພັດທະນາໂຄງການ;

2. ຂະແໜງການການເງິນ ກວດກາການສະໜອງ ແລະ ນຳໃຊ້ງົບປະມານ ໃນໂຄງການລົງທຶນຂອງລັດ;

3. ຂະແໜງການວິຊາການອື່ນ ກວດກາທາງດ້ານມາດຕະຖານເຕັກນິກ, ເຕັກໂນໂລຊີ, ສິ່ງແວດລ້ອມ, ຄຸນນະພາບ, ຄວາມປອດໄພ, ການນຳໃຊ້ວັດຖຸປະກອນ.

**ມາດຕາ 95 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ສະພາແຫ່ງຊາດ ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ໂຄງການລົງທຶນຂອງລັດ;

2. ສະພາປະຊາຊົນຂັ້ນແຂວງ ກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ໂຄງການລົງທຶນຂອງລັດ ຂອງແຂວງ, ນະຄອນຫຼວງ ແລະ ໂຄງການຂອງຂະແໜງການທີ່ໄປຈັດຕັ້ງປະຕິບັດຢູ່ ແຂວງ, ນະຄອນຫຼວງນັ້ນ;

3. ອົງການກວດສອບແຫ່ງລັດ ກວດກາການນຳໃຊ້ງົບປະມານ, ຄວາມໂປ່ງໃສໃນການເບີກຈ່າຍງົບປະມານ ໃນການປະຕິບັດໂຄງການລົງທຶນຂອງລັດ;

4. ອົງການກວດກາລັດ ກວດກາຄວາມໂປ່ງໃສໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;

5. ອົງການປົກຄອງທ້ອງຖິ່ນ ກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ, ເຂົ້າຮ່ວມການກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຢູ່ທ້ອງຖິ່ນຕົນ;

6. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເຂົ້າຮ່ວມໃນການກວດກາການປະຕິບັດໂຄງການລົງທຶນຂອງລັດ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນ;

7. ປະຊາຊົນ ຕິດຕາມ, ລາຍງານການປະຕິບັດໂຄງການລົງທຶນຂອງລັດ ທີ່ບໍ່ຖືກຕ້ອງ ຊຶ່ງຈະສ້າງຄວາມເສຍຫາຍແກ່ສາທາລະນະ ຫຼື ຜົນປະໂຫຍດລວມຂອງຊາດ.

**ມາດຕາ 96 ຮູບການ ການກວດກາ**

ຮູບການ ການກວດກາ ມີ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງເທື່ອຕໍ່ປີ;

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອຫາກເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ອົງການທີ່ຮັບຜິດຊອບໃນການສ້າງ, ການຄຸ້ມຄອງໂຄງການລົງທຶນຂອງລັດ ຫຼື ຜູ້ດຳເນີນກິດຈະການລົງທຶນຂອງລັດຮູ້ລ່ວງໜ້າ ຢ່າງໜ້ອຍຊາວສີ່ຊົ່ວໂມງ;

ການກວດກາແບບກະທັນຫັນ ແມ່ນ ການກວດກາເມື່ອຫາກເຫັນວ່າມີຄວາມຈຳເປັນ ແຕ່ການຕົກລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ອົງການທີ່ຮັບຜິດຊອບໃນການສ້າງ, ການຄຸ້ມຄອງໂຄງການລົງທຶນຂອງລັດ ຫຼື ຜູ້ດຳເນີນກິດຈະການລົງທຶນຂອງລັດ ຮູ້ລ່ວງໜ້າ.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ, ກວດກາດ້ານເຕັກນິກ ແລະ ລົງກວດກາການປະຕິບັດຕົວຈິງຂອງການຈັດຕັ້ງ ແລະ ບຸກຄົນ ຢູ່ສະຖານທີ່ປະຕິບັດງານ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 97 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ສຳເລັດຕາມກຳນົດເວລາ, ປະຢັດລາຍຈ່າຍ, ຄຸ້ມຄອງທຶນບໍ່ຮົ່ວໄຫຼ, ມີປະສິດທິຜົນສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 98 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ແລ້ວແຕ່ ກໍລະນີເບົາ ຫຼື ໜັກ ເຊັ່ນ ສຶກສາອົບຮົມ, ປັບໃໝ, ລົງວິໄນ ແລະ ລົງໂທດທາງອາຍາພ້ອມທັງໃຊ້ແທນຄ່າເສຍຫາຍ.

### ມາດຕາ 99 ມາດຕະການສຶກສາອົບຮົມ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ທີ່ເປັນການກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ເປັນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 100 ມາດຕະການປັບໃໝ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຜ່ານການກ່າວເຕືອນ ແລະ ສຶກສາອົບຮົມແລ້ວ ແຕ່ຫາກບໍ່ເຂັດຫຼາບ, ກໍ່ຄວາມເສຍຫາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 101 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດລະບຽບ, ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຂອງລັດ ໂດຍເຈດຕະນາ ແຕ່ບໍ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງວິໄນ ເປັນຕົ້ນ ການໂຈະການປະຕິບັດໜ້າທີ່ຊົ່ວຄາວ, ສັບປ່ຽນໜ້າທີ່ ຫຼື ປົດຕໍາແໜ່ງ ແລະ ອື່ນໆ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 102 ມາດຕະການທາງແພ່ງ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ເນື່ອງຈາກການລົງທຶນ ຈະຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 103 (ປັບປຸງ) ມາດຕະການທາງອາຍາ.**

ບຸກຄົນ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຂອງລັດ ແລະ ຂໍ້ຫ້າມ ຊຶ່ງເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ ຊັບສິນ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນອື່ນ  ຈະຖືກລົງໂທດທາງອາຍາຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກໍານົດໂທດທາງອາຍາ.

## ພາກທີ VII

## ບົດບັນຍັດສຸດທ້າຍ

**ມາດຕາ 104 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 105 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 26 ພະຈິກ 2009.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ ເລກທີ 206 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16.12. 2016

# ລັດຖະດຳລັດ

## ຂອງປະທານປະເທດ

### ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ( ສະບັບປັບປຸງ ປີ 2015 );
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 032/ສພຊ, ລົງວັນທີ 17 ພະຈິກ 2016 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 048/ຄປຈ, ລົງວັນທີ 7 ທັນວາ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 032 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17/11/16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ)

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ (ສະບັບປັບປຸງ ປີ 2015) ແລະ ມາດຕາ 11 ຂໍ້ 1 ຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າ ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ໃນວັນທີ 17 ພະຈິກ 2016.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 14/ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ພະຈິກ 2016

# ກົດໝາຍ
# ວ່າດ້ວຍ ການສົ່ງເສີມການລົງທຶນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງເສີມ, ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ການລົງທຶນ ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ ແນໃສ່ຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຂອງລັດ, ຂອງລວມໝູ່, ຂອງປະຊາຊົນ ສາມາດເຊື່ອມໂຍງກັບເສດຖະກິດພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 (ປັບປຸງ) ການສົ່ງເສີມການລົງທຶນ**

ການສົ່ງເສີມການລົງທຶນ ແມ່ນ ການວາງນະໂຍບາຍສົ່ງເສີມ, ການສ້າງສະພາບແວດລ້ອມ ແລະ ເງື່ອນໄຂໃນດ້ານຕ່າງໆ ແກ່ການລົງທຶນ ເພື່ອໃຫ້ຜູ້ລົງທຶນ ສາມາດດຳເນີນທຸລະກິດ ໄດ້ຢ່າງສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ການລົງທຶນ** ໝາຍເຖິງ ການນຳເອົາເງິນທຶນ, ຊັບສິນ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອດຳ

ເນີນທຸລະກິດ ຢູ່ ສປປ ລາວ;

2. **ຜູ້ລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ຢູ່ພາຍໃນ ສປປ ລາວ ຫຼື ຢູ່ຕ່າງປະເທດ ຢ່າງຖືກຕ້ອງຕາມກົດໝາຍ;

3. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ເຂົ້າມາລົງທຶນ ຢູ່ ສປປ ລາວ;

4. **ຜູ້ລົງທຶນພາຍໃນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ລາວ ຫຼື ຕ່າງປະເທດ ທີ່ຈົດທະບຽນດຳເນີນ ທຸລະກິດ ຕາມກົດໝາຍ ຂອງ ສປປ ລາວ;

5. **ທຶນທີ່ເປັນຊັບສິນມີຕົວຕົນ** ໝາຍເຖິງ ເງິນຕາ, ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ;

6. **ທຶນທີ່ເປັນຊັບສິນບໍ່ມີຕົວຕົນ** ໝາຍເຖິງ ຊັບສິນທາງປັນຍາ, ລາຍຮັບທີ່ຈະເກີດຂຶ້ນໃນ ອະນາຄົດ, ສິດເຊົ່າ, ສິດທາງດ້ານການຄ້າ ແລະ ມູນຄ່າການສຳປະທານ;

7. **ຊັບສິນຂອງຜູ້ລົງທຶນ** ໝາຍເຖິງ ທຶນທີ່ເປັນຊັບສິນມີຕົວຕົນ ແລະ ທຶນເປັນຊັບສິນບໍ່ມີຕົວຕົນ ເປັນກຳມະສິດຂອງຜູ້ລົງທຶນ ທີ່ສາມາດນຳໄປເປັນຫຼັກຊັບຄ້ຳປະກັນກູ້ຢືມເງິນຈາກທະນາຄານ;

8. **ສັນຍາສຳປະທານ** ໝາຍເຖິງ ສັນຍາທີ່ເຊັນ ລະຫວ່າງ ນິຕິບຸກຄົນ ກັບອົງການຂອງລັດ ທີ່ໄດ້ ຮັບມອບໝາຍ ເພື່ອໃຫ້ສິດໃນການດຳເນີນທຸລະກິດ ຫຼື ການພັດທະນາໂຄງການໃດໜຶ່ງ ພາຍໃຕ້ກົດ ໝາຍຂອງ ສປປ ລາວ ແລະ ພາຍໃຕ້ບັນດາເງື່ອນໄຂສະເພາະຕາມສັນຍາ;

9. **ບົດບັນທຶກຄວາມເຂົ້າໃຈ** ໝາຍເຖິງ ເອກະສານບັນທຶກການຕົກລົງ ລະຫວ່າງ ນິຕິບຸກຄົນ ກັບ ອົງການຂອງລັດ ທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສິດໃນການສຶກສາຄວາມເປັນໄປໄດ້ຂອງໂຄງການ;

10. **ພາຫະນະຮັບໃຊ້ການຜະລິດໂດຍກົງ** ໝາຍເຖິງ ກົນຈັກ ແລະ ພາຫະນະ ທີ່ນຳໃຊ້ໂດຍກົງເຂົ້າ ໃນການດຳເນີນກິດຈະການລົງທຶນ ຕາມການອະນຸມັດແຜນນຳເຂົ້າຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

11. **ການລົງທຶນທາງກົງ** ໝາຍເຖິງ ການນຳເອົາທຶນ ເຂົ້າດຳເນີນທຸລະກິດ ຊຶ່ງເຮັດໃຫ້ຜູ້ລົງທຶນ ກາຍເປັນເຈົ້າຂອງວິສາຫະກິດ, ຄຸ້ມຄອງບໍລິຫານ ຫຼື ຂະຫຍາຍວິສາຫະກິດ ທີ່ກ່ຽວຂ້ອງ;

12. **ການອອກໄປລົງທຶນຢູ່ຕ່າງປະເທດຂອງຜູ້ລົງທຶນພາຍໃນ** ໝາຍເຖິງ ການນຳເອົາທຶນ ແລະ ຊັບສິນຂອງຜູ້ລົງທຶນ ທີ່ຈົດທະບຽນຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ ອອກໄປລົງທຶນຢູ່ ຕ່າງປະເທດ;

13. **ວັນລັດຖະການ** ໝາຍເຖິງ ວັນເຮັດວຽກຕາມປະຕິທິນ ຂອງ ສປປ ລາວ;

14. **ຄະນະຄຸ້ມຄອງເຂດ** ໝາຍເຖິງ ຫົວໜ່ວຍການຈັດຕັ້ງ ທີ່ສ້າງຕັ້ງຂຶ້ນໂດຍອົງການຂອງລັດ ເພື່ອສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຊຶ່ງໄດ້ຮັບການອະນຸຍາດໃຫ້ສ້າງຕັ້ງຢູ່ ບັນດາແຂວງ, ນະຄອນຫຼວງ.

## ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານສົ່ງເສີມການລົງທຶນ

ລັດ ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກຕ່າງໆເປັນຕົ້ນ ການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນຂ່າວສານທີ່ຈຳເປັນ, ການໃຫ້ນະໂຍບາຍດ້ານພາສີ, ສ່ວຍສາອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບ ລວມທັງການຮັບຮູ້, ການປົກປ້ອງກຳມະສິດ ກ່ຽວກັບສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດສືບທອດ, ສິດໂອນ ແລະ ສິດອື່ນໆ ຕາມທີ່ກົດໝາຍກຳນົດໄວ້.

ລັດ ສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການ ແລະ ທຸກເຂດ ໃນທົ່ວປະເທດ ເວັ້ນເສຍແຕ່ ເຂດ ແລະ ກິດຈະການ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງ ຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ.

ລັດ ຍັງໃຫ້ນະໂຍບາຍສົ່ງເສີມພິເສດ ສະເພາະຂະແໜງການທີ່ເປັນບູລິມະສິດຂອງລັດ ຢ່າງເໝາະສົມ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານສົ່ງເສີມການລົງທຶນ

ວຽກງານສົ່ງເສີມການລົງທຶນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂະແໜງການ, ເຂດ ແລະ ການຂະຫຍາຍເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. ສົມທົບແໜ້ນ ກັບການເພີ່ມທະວີ ການຄຸ້ມຄອງຂອງລັດຢ່າງລວມສູນ ເປັນເອກະພາບ ໃນທົ່ວປະເທດ;

3. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;

4. ຮັບປະກັນການບໍລິການ ການລົງທຶນປະຕູດຽວ ໃຫ້ສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍ;

5. ຮັບປະກັນການແຂ່ງຂັນທາງທຸລະກິດທີ່ເປັນທຳ;

6. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ມີປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການລົງທຶນຂອງບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ແລະ ຜູ້ລົງທຶນພາຍໃນ ອອກໄປລົງທຶນຢູ່ຕ່າງປະເທດ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງທຶນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ປະສົບການດ້ານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ການຕະຫຼາດ, ການຄ້າ, ແຫຼ່ງທຶນ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ນະໂຍບາຍສົ່ງເສີມ, ຊ່ວຍໜູນ ແລະ ປົກປ້ອງການລົງທຶນ
### ໝວດທີ 1
### ນະໂຍບາຍສົ່ງເສີມການລົງທຶນ

**ມາດຕາ 8 (ປັບປຸງ) ນະໂຍບາຍສົ່ງເສີມການລົງທຶນ**

ນະໂຍບາຍສົ່ງເສີມການລົງທຶນ ມີ ດັ່ງນີ້:

1. ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ;
2. ນະໂຍບາຍສົ່ງເສີມຕາມເຂດ;
3. ນະໂຍບາຍສົ່ງເສີມດ້ານ ພາສີ, ສ່ວຍສາອາກອນ, ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ ແລະ ນະໂຍບາຍອື່ນ.

**ມາດຕາ 9 (ປັບປຸງ) ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ**

ກິດຈະການຕາມຂະແໜງການ ທີ່ໄດ້ຮັບນະໂຍບາຍສົ່ງເສີມ ມີ ດັ່ງນີ້:

1. ການນຳໃຊ້ເຕັກໂນໂລຊີສູງ ແລະ ທັນສະໄໝ, ການຄົ້ນຄວ້າວິໄຈວິທະຍາສາດ, ການຄົ້ນຄວ້າ ແລະ ການພັດທະນາ, ການນຳໃຊ້ນະວັດຕະກຳ, ເປັນມິດກັບສິ່ງແວດລ້ອມ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ;
2. ກະສິກຳສະອາດ, ປອດສານພິດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາຫະກຳ, ການພັດທະນາປ່າໄມ້, ປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ, ກິດຈະການສົ່ງເສີມການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

3. ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ທີ່ເປັນມິດຕໍ່ສິ່ງແວດລ້ອມ, ອຸດສາຫະກຳປຸງແຕ່ງຫັດຖະກຳ ທີ່ເປັນມູນເຊື້ອ ແລະ ເອກະລັກຂອງຊາດ;

4. ການພັດທະນາອຸດສາຫະກຳທ່ອງທ່ຽວ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ;

5. ການສຶກສາ, ກິລາ-ກາຍຍະກຳ, ພັດທະນາຊັບພະຍາກອນມະນຸດ ແລະ ພັດທະນາສີມືແຮງງານ, ສະຖາບັນ ຫຼື ສູນຝຶກວິຊາຊີບ, ຜະລິດອຸປະກອນຮັບໃຊ້ການສຶກສາ ແລະ ກິລາ;

6. ສ້າງໂຮງໝໍທັນສະໄໝ, ໂຮງງານຜະລິດຢາ ແລະ ອຸປະກອນການແພດ, ການຜະລິດ ແລະ ປິ່ນປົວດ້ວຍຢາພື້ນເມືອງ;

7. ການລົງທຶນ, ການບໍລິການ ແລະ ການພັດທະນາພື້ນຖານໂຄງລ່າງສາທາລະນະປະໂຫຍດ ເພື່ອແກ້ໄຂການສັນຈອນແອອັດໃນຕົວເມືອງ ແລະ ບ່ອນຢູ່ອາໄສ; ການກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ໃຫ້ແກ່ການຜະລິດກະສິກຳ ແລະ ອຸດສາຫະກຳ, ການບໍລິການຂົນສົ່ງສິນຄ້າ, ບໍລິການ ທາງຜ່ານ ແລະ ເຊື່ອມໂຍງລະຫວ່າງ ປະເທດ;

8. ທະນາຄານນະໂຍບາຍ ແລະ ສະຖາບັນການເງິນຈຸລະພາກ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຊຸມຊົນ ຜູ້ທີ່ບໍ່ສາມາດເຂົ້າເຖິງທະນາຄານ;

9. ສູນການຄ້າທັນສະໄໝທີ່ສົ່ງເສີມຜະລິດຕະພັນພາຍໃນ ແລະ ຍີ່ຫໍ້ທີ່ມີຊື່ສຽງຂອງໂລກ, ສູນວາງສະແດງ ແລະ ຕະຫຼາດນັດ ຜະລິດຕະພັນພາຍໃນທາງດ້ານອຸດສາຫະກຳ, ຫັດຖະກຳ ແລະ ກະສິກຳ.

ການລົງທຶນກິດຈະການຕາມຂະແໜງການ ທີ່ໄດ້ຮັບນະໂຍບາຍສົ່ງເສີມ ຕາມມາດຕານີ້ ຕ້ອງມີມູນຄ່າຢ່າງໜ້ອຍ ໜຶ່ງຕື້ສອງຮ້ອຍລ້ານກີບ ຫຼື ມີການນຳໃຊ້ນັກວິຊາການລາວ ແຕ່ ສາມສິບ ຄົນ ຫຼື ມີການນຳໃຊ້ແຮງງານລາວທີ່ມີສັນຍາແຮງງານ ຢ່າງຕໍ່າ ໜຶ່ງປີ ແຕ່ ຫ້າສິບ ຄົນ ຂຶ້ນໄປ.

ສຳລັບ ທຸລະກິດຂະໜາດນ້ອຍ-ຂະໜາດກາງ ທີ່ມີທຶນ ແລະ ແຮງງານ ຕໍ່າກວ່າຕາມທີ່ກຳນົດໄວ້ໃນ ວັກ 2 ຂອງມາດຕານີ້ ຈະໄດ້ຮັບນະໂຍບາຍສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ລັດຖະບານ ເປັນຜູ້ກຳນົດບັນຊີລະອຽດ ບັນດາກິດຈະການຕາມຂະແໜງການ ທີ່ໄດ້ຮັບການສົ່ງເສີມ.

**ມາດຕາ 10 (ປັບປຸງ) ນະໂຍບາຍສົ່ງເສີມຕາມເຂດ**

ນະໂຍບາຍສົ່ງເສີມຕາມເຂດ ກຳນົດເປັນ ສາມ ເຂດ ດັ່ງນີ້:

ເຂດ 1: ເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ;

ເຂດ 2: ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ເອື້ອອໍານວຍແກ່ການລົງທຶນ;

ເຂດ 3: ເຂດເສດຖະກິດພິເສດ.

ລັດຖະບານ ເປັນຜູ້ກໍານົດເຂດ ໃນແຕ່ລະໄລຍະ.

**ມາດຕາ 11 (ປັບປຸງ) ນະໂຍບາຍດ້ານອາກອນກໍາໄລ ໃນກິດຈະການຕາມຂະແໜງການ ແລະ ເຂດ**

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ແລະ ເຂດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍສະບັບນີ້ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກໍາໄລ ດັ່ງນີ້:

ເຂດ 1: ໄດ້ຮັບການຍົກເວັ້ນໃນໄລຍະເວລາ ສິບ ປີ, ສໍາລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂໍ້ 2, 3, 5 ແລະ ຂໍ້ 6 ຂອງກົດໝາຍສະບັບນີ້ ຈະໄດ້ຮັບຍົກເວັ້ນ ເພີ່ມອີກ ຫ້າ ປີ;

ເຂດ 2: ໄດ້ຮັບການຍົກເວັ້ນໃນໄລຍະເວລາ ສີ່ ປີ, ສໍາລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂໍ້ 2, 3, 5 ແລະ ຂໍ້ 6 ຂອງກົດໝາຍສະບັບນີ້ ຈະໄດ້ຮັບຍົກເວັ້ນ ເພີ່ມອີກ ສາມ ປີ;

ໄລຍະການຍົກເວັ້ນອາກອນກໍາໄລ ໃຫ້ນັບແຕ່ປີທີ່ວິສາຫະກິດ ມີລາຍຮັບທຸລະກິດ ເປັນຕົ້ນໄປ.

ຫຼັງຈາກສິ້ນສຸດໄລຍະຍົກເວັ້ນອາກອນກໍາໄລດັ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ກິດຈະການດັ່ງກ່າວໃຫ້ປະຕິບັດຕາມກົດໝາຍວ່າດ້ວຍສ່ວຍສາອາກອນ.

ເຂດ 3: ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ.

ສໍາລັບກິດຈະການສໍາປະທານ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ຕາມສັນຍາ.

ລັດຖະບານ ເປັນຜູ້ກໍານົດລະບຽບການ ແລະ ຂັ້ນຕອນລະອຽດ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການຍົກເວັ້ນອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 12 (ປັບປຸງ) ນະໂຍບາຍສົ່ງເສີມດ້ານພາສີ ແລະ ອາກອນມູນຄ່າເພີ່ມ**

ຜູ້ລົງທຶນ ທີ່ລົງທຶນຢູ່ ສປປ ລາວ, ນອກຈາກໄດ້ຮັບນະໂຍບາຍດ້ານອາກອນກໍາໄລແລ້ວ ຍັງຈະໄດ້ຮັບນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ດັ່ງນີ້:

1. ການນໍາເຂົ້າວັດຖຸປະກອນ ທີ່ບໍ່ສາມາດ ສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອສ້າງເປັນຊັບສິນບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນພາສີ ແລະ ເສຍອາກອນມູນຄ່າເພີ່ມໃນອັດຕາ ສູນ ສ່ວນຮ້ອຍ (0%); ສ່ວນການນໍາເຂົ້າ ນໍ້າມັນເຊື້ອໄຟ, ອາຍແກັສ, ນໍ້າມັນຫຼໍ່ລື່ນ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖຸປະກອນອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ສໍາລັບການນໍາເຂົ້າຊົ່ວຄາວ ພາຫະນະກົນຈັກ ຕ້ອງໄດ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ.

2. ການນຳເຂົ້າ ວັດຖຸດິບ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ ຈະໄດ້ງົດເກັບພາສີ ໃນເວລານຳເຂົ້າ ແລະ ຍົກເວັ້ນພາສີ ໃນເວລາສົ່ງອອກ ແລະ ເສຍອາກອນມູນຄ່າເພີ່ມໃນອັດຕາ ສູນ ສ່ວນຮ້ອຍ (0%);

3. ການນຳໃຊ້ວັດຖຸດິບພາຍໃນ ທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ ເພື່ອຜະລິດເປັນຜະລິດຕະພັນສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ໃຫ້ເສຍອາກອນມູນຄ່າເພີ່ມໃນອັດຕາ ສູນ ສ່ວນຮ້ອຍ (0%).

ລັດຖະບານ ເປັນຜູ້ກຳນົດ ບັນຊີລາຍການຜະລິດຕະພັນເຄິ່ງສຳເລັດຮູບ ເພື່ອສົ່ງອອກ.

## ມາດຕາ 13 ນະໂຍບາຍເຂົ້າເຖິງແຫຼ່ງທຶນ

ຜູ້ລົງທຶນ ໄດ້ຮັບນະໂຍບາຍເຂົ້າເຖິງແຫຼ່ງທຶນ ດ້ວຍການກູ້ຢືມເງິນນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ຢູ່ ສປປ ລາວ ແລະ ຕ່າງປະເທດ ຕາມກົດໝາຍທີ່ກ່ຽວຂ້ອງ.

## ມາດຕາ 14 (ໃໝ່) ນະໂຍບາຍຂະຫຍາຍການລົງທຶນ ແລະ ນະໂຍບາຍດ້ານພາສີ, ອາກອນອື່ນ

ຜູ້ລົງທຶນ ທີ່ນຳເອົາກຳໄລສຸດທິໄປລົງທຶນຕໍ່ ເພື່ອເພີ່ມກິດຈະການ ຫຼື ຂະຫຍາຍກິດຈະການລົງທຶນ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລໃນປີການບັນຊີຖັດໄປ ໜຶ່ງ ປີ ຕາມອັດຕາສ່ວນກຳໄລທີ່ນຳເອົາໄປລົງທຶນຕໍ່ ເພື່ອເພີ່ມກິດຈະການ ຫຼື ຂະຫຍາຍກິດຈະການລົງທຶນຂອງຕົນ.

ຜູ້ລົງທຶນ ທີ່ມີການຂາດທຶນຈາກການດຳເນີນທຸລະກິດ ສາມາດຍົກຍອດເງິນຂາດທຶນໃນປີ ໄປຫັກອອກຈາກກຳໄລຂອງປີການບັນຊີຖັດໄປ ພາຍໃນເວລາ ສາມປີ ໂດຍຕ້ອງໄດ້ຮັບການຢັ້ງຢືນຢ່າງຖືກຕ້ອງຈາກເຈົ້າໜ້າທີ່ສ່ວຍສາອາກອນ. ເມື່ອໝົດກຳນົດແລ້ວ ຍອດເງິນຂາດທຶນທີ່ຍັງເຫຼືອຈະບໍ່ອະນຸຍາດໃຫ້ຫັກອອກຈາກກຳໄລຕໍ່ໄປອີກ.

ສຳລັບ ການຂະຫຍາຍການລົງທຶນ ແລະ/ຫຼື ຂະຫຍາຍກິດຈະການ ດ້ວຍການລົງທຶນເພີ່ມ ກໍຈະໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍສະບັບນີ້.

## ມາດຕາ 15 (ປັບປຸງ) ນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ໄດ້ຮັບນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ດັ່ງນີ້:

ເຂດ 1: ໄດ້ຮັບການຍົກເວັ້ນໃນໄລຍະ ສິບ ປີ, ສຳລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂໍ້ 2, 3, 5 ແລະ ຂໍ້ 6 ຂອງກົດໝາຍສະບັບນີ້ ຈະໄດ້ຮັບຍົກເວັ້ນເພີ່ມອີກ ຫ້າ ປີ;

ເຂດ 2: ໄດ້ຮັບການຍົກເວັ້ນໃນໄລຍະ ຫ້າ ປີ, ສຳລັບການລົງທຶນໃນກິດຈະການຕາມຂະແໜງການ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂໍ້ 2, 3, 5 ແລະ ຂໍ້ 6 ຂອງກົດໝາຍສະບັບນີ້ ຈະໄດ້ຮັບຍົກເວັ້ນເພີ່ມອີກ ສາມ ປີ;

ເຂດ 3: ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 16 (ປັບປຸງ) ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ**

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການສຳປະທານ ຢູ່ ສປປ ລາວ ໄດ້ຮັບນະໂຍບາຍສົ່ງເສີມດ້ານການນຳ ໃຊ້ທີ່ດິນ ດັ່ງນີ້:

1. ຜູ້ລົງທຶນ ມີ ສິດ ເຊົ່າ ແລະ ສຳປະທານທີ່ດິນຂອງລັດ ເພື່ອດຳເນີນກິດຈະການລົງທຶນ ແລະ ສາມາດ ໂອນສິດໃຊ້ທີ່ດິນ ທີ່ຕົນໄດ້ຮັບສິດສຳປະທານ ໃນຂອບເຂດອາຍຸສຳປະທານທີ່ຍັງເຫຼືອ, ພາຍຫຼັງໄດ້ລົງທຶນ ແລະ ໄດ້ປະຕິບັດໜ້າວຽກສຳເລັດ ຢ່າງນ້ອຍ ສີ່ສິບຫ້າ ສ່ວນຮ້ອຍ (45%) ຂອງແຜນແມ່ບົດພັດທະນາໂຄງການ, ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດທີ່ຖືກຮັບຮອງແລ້ວ ແລະ ໄດ້ປະຕິບັດພັນທະຕາມສັນຍາສຳປະທານ ແລະ ໄດ້ຮັບການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ;

2. ຜູ້ລົງທຶນ ມີສິດໃຊ້ທີ່ດິນ ດ້ວຍການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ນອກເຂດສຳປະທານ ເພື່ອ ໃຊ້ສະເພາະປູກສ້າງສຳນັກງານຫ້ອງການ ແລະ ທີ່ຢູ່ອາໄສ ຕາມກຳນົດເວລາຂອງການລົງທຶນ ດ້ວຍການຕົກລົງ ຂອງອົງການປົກຄອງ ແຂວງ, ນະຄອນຫຼວງ.

ລັດຖະບານ ເປັນຜູ້ກຳນົດລະບຽບການໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ.

## ໝວດທີ 2
## ນະໂຍບາຍຊ່ວຍໜູນການລົງທຶນ

**ມາດຕາ 17 (ປັບປຸງ) ນະໂຍບາຍຊ່ວຍໜູນການລົງທຶນ**

ນະໂຍບາຍຊ່ວຍໜູນການລົງທຶນ ມີ ດັ່ງນີ້:

1. ນະໂຍບາຍດ້ານຂໍ້ມູນ ຂ່າວສານ;
2. ນະໂຍບາຍຊ່ວຍໜູນອື່ນ.

**ມາດຕາ 18 ນະໂຍບາຍດ້ານຂໍ້ມູນຂ່າວສານ**

ເພື່ອຮັບປະກັນໃຫ້ຜູ້ລົງທຶນ ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບການລົງທຶນ ຢ່າງຄົບຖ້ວນ ເອກະພາບ, ວ່ອງໄວ, ທັນການ ແລະ ສາມາດຕັດສິນໃຈລົງທຶນໄດ້ນັ້ນ ຕ້ອງສ້າງຂໍ້ມູນຂ່າວສານການລົງທຶນ ຢູ່ໃນຫ້ອງການບໍລິການ ການລົງທຶນປະຕູດຽວ ທີ່ກ່ຽວຂ້ອງ.

ສູນຂໍ້ມູນ ຂ່າວສານການລົງທຶນ ເປັນຜູ້ເກັບກຳ ແລະ ສັງລວມບັນດາຂໍ້ມູນ ກ່ຽວກັບການລົງທຶນ ເພື່ອສ້າງເຄືອຂ່າຍ, ສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ເປັນຕົ້ນ ການໂຄສະນາຜ່ານລະບົບເວັບໄຊສ໌, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ອື່ນໆ ກ່ຽວກັບການລົງທຶນ ໃຫ້ຜູ້ທີ່ມີຄວາມສົນໃຈ, ສະຖານທູດ, ກົງສູນລາວ ຫຼື ຫ້ອງການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈຳຢູ່ຕ່າງປະເທດ

ເພື່ອສະໜອງໃຫ້ຜູ້ທີ່ຕ້ອງການມາລົງທຶນ.

**ມາດຕາ 19 (ປັບປຸງ) ນະໂຍບາຍຊ່ວຍໜູນອື່ນ**

ຜູ້ລົງທຶນ ໄດ້ຮັບນະໂຍບາຍຊ່ວຍໜູນອື່ນ ດັ່ງນີ້:

1. ໄດ້ຮັບການພິຈາລະນາຍ້ອງຍໍຈາກລັດຖະບານ ດ້ວຍຫຼາຍຮູບແບບທີ່ເໝາະສົມ ສໍາລັບຜູ້ລົງທຶນທີ່ໄດ້ປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ, ທັນເວລາ, ປະກອບສ່ວນພັດທະນາຊຸມຊົນ, ສັງຄົມ, ເອົາໃຈໃສ່ແກ້ໄຂບັນຫາສິ່ງແວດລ້ອມ, ພັດທະນາສີມືແຮງງານລາວ ໂດຍມີການຢັ້ງຢືນຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

2. ໄດ້ຮັບຄວາມສະດວກໃນການຂໍບັດອະນຸຍາດພັກເຊົາ ແລະ ວີຊາທຸລະກິດ ເຂົ້າ-ອອກ ຫຼາຍເທື່ອ ສໍາລັບຜູ້ລົງທຶນຕ່າງປະເທດ ຕາມໄລຍະເວລາຂອງການລົງທຶນ.

ຜູ້ລົງທຶນຕ່າງປະເທດພ້ອມດ້ວຍສະມາຊິກຄອບຄົວ, ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ໄດ້ຮັບຄວາມສະດວກໃນການເຂົ້າ-ອອກ ສປປ ລາວ ລວມທັງການຂໍວີຊາເຂົ້າ-ອອກຫຼາຍເທື່ອ ຊຶ່ງແຕ່ລະຄັ້ງບໍ່ໃຫ້ ເກີນ ຫ້າ ປີ;

3. ກໍລະນີ ມີຄວາມຈໍາເປັນຕ້ອງໃຫ້ນະໂຍບາຍສົ່ງເສີມພິເສດເພີ່ມເຕີມ ໃນບາງຂະແໜງການ, ບາງເຂດນັ້ນ ລັດຖະບານນໍາສະເໜີຕໍ່ ຄະນະປະຈໍາສະພາແຫ່ງຊາດ ຫຼື ສະພາແຫ່ງຊາດ ພິຈາລະນາ ແລະ ຕົກລົງ.

ລັດຖະບານ ເປັນຜູ້ກໍານົດລະບຽບການຈັດຕັ້ງປະຕິບັດນະໂຍບາຍຊ່ວຍໜູນອື່ນສໍາລັບຜູ້ລົງທຶນ.

**ມາດຕາ 20 (ປັບປຸງ) ການຈັດຕັ້ງປະຕິບັດການໃຫ້ນະໂຍບາຍສົ່ງເສີມ**

ນິຕິບຸກຄົນ ທີ່ມີເງື່ອນໄຂໄດ້ຮັບນະໂຍບາຍສົ່ງເສີມ ແລະ ຊ່ວຍໜູນການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ສາມາດຍື່ນຄໍາຮ້ອງຕໍ່ ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອສະເໜີຂໍໃບສົ່ງເສີມການລົງທຶນ.

**ມາດຕາ 21 (ປັບປຸງ) ການຈັດຕັ້ງປະຕິບັດກົນໄກໃຫ້ນະໂຍບາຍອື່ນ**

ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງໄດ້ຕິດຕາມ ແລະ ຢັ້ງຢືນຕໍ່ຜົນງານການປະກອບສ່ວນຂອງຫົວໜ່ວຍທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 19 ຂໍ້ 1 ຂອງກົດໝາຍສະບັບນີ້ ເພື່ອໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້າ ສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນຂອງຕົນ ພິຈາລະນາຍ້ອງຍໍ ຫຼື ໃຫ້ນະໂຍບາຍສົ່ງເສີມອື່ນ ຕາມລະບຽບການ.

## ໝວດທີ 3
## ການປົກປ້ອງການລົງທຶນ

### ມາດຕາ 22 (ປັບປຸງ ) ການປົກປ້ອງການລົງທຶນ

ລັດ ປົກປ້ອງສິດ, ຜົນປະໂຫຍດ ອັນຊອບທຳ ແລະ ສິດສະເໝີພາບ ຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນພາຍໃຕ້ກົດໝາຍ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 23 ຮູບການປົກປ້ອງການລົງທຶນ

ລັດ ຮັບຮູ້ ແລະ ປົກປ້ອງການລົງທຶນ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນຢ່າງເຕັມສ່ວນ ໂດຍບໍ່ ຖືກເກັບເກນ, ບໍ່ຖືກຍຶດ ຫຼື ໂອນມາເປັນຂອງລັດ ດ້ວຍວິທີການທາງດ້ານບໍລິຫານ.

ໃນກໍລະນີທີ່ລັດຖະບານ ມີຄວາມຈຳເປັນນຳໃຊ້ເພື່ອສາທາລະນະປະໂຫຍດ ຜູ້ລົງທຶນຈະໄດ້ຮັບຄ່າທົດແທນຄືນຕາມມູນຄ່າຕົວຈິງທີ່ໄດ້ລົງທຶນ ຕາມລາຄາຕະຫຼາດ ໃນເວລາມອບໂອນ ແລະ ດ້ວຍວິທີການຊຳລະທີ່ຕົກລົງກັນ.

### ມາດຕາ 24 ການປົກປ້ອງຊັບສິນທາງປັນຍາ

ລັດ ຮັບຮູ້ ແລະ ປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນ ທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ III
## ການເຄື່ອນໄຫວການລົງທຶນ

### ມາດຕາ 25 (ໃໝ່) ການເຄື່ອນໄຫວການລົງທຶນ

ການເຄື່ອນໄຫວການລົງທຶນ ແມ່ນ ການດຳເນີນກິດຈະການການລົງທຶນ ຕາມຮູບການ, ປະເພດກິດຈະການ, ເງື່ອນໄຂ, ຂັ້ນຕອນ, ທຶນຈົດທະບຽນ ແລະ ການນຳເຂົ້າທຶນ.

## ໝວດທີ 1
## ຮູບການ ແລະ ປະເພດກິດຈະການ ການລົງທຶນ

### ມາດຕາ 26 (ປັບປຸງ) ຮູບການ ການລົງທຶນ

ການລົງທຶນ ປະກອບດ້ວຍຮູບການ ດັ່ງນີ້:

1. ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ;

2. ການລົງທຶນຮ່ວມ ລະຫວ່າງ ຜູ້ລົງທຶນພາຍໃນກັບຕ່າງປະເທດ;

3. ການລົງທຶນທຸລະກິດຮ່ວມຕາມສັນຍາ;

4. ການລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ;

5. ການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ.

ລັດຖະບານ ສາມາດເຂົ້າຖືຮຸ້ນໃນກິດຈະການສຳປະທານ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

## ມາດຕາ 27 ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ

ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ແມ່ນ ການລົງທຶນຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດຝ່າຍດຽວ ຊຶ່ງອາດຈະມີຜູ້ລົງທຶນ ຜູ້ດຽວ ຫຼື ຫຼາຍຄົນ ໃນກິດຈະການ ຫຼື ໂຄງການໃດໜຶ່ງຢູ່ ສປປ ລາວ.

## ມາດຕາ 28 ການລົງທຶນຮ່ວມ ລະຫວ່າງ ຜູ້ລົງທຶນພາຍໃນ ກັບຕ່າງປະເທດ

ການລົງທຶນຮ່ວມ ລະຫວ່າງຜູ້ລົງທຶນພາຍໃນ ກັບຕ່າງປະເທດ ແມ່ນ ການຮ່ວມລົງທຶນລະຫວ່າງຜູ້ລົງທຶນພາຍໃນ ກັບຕ່າງປະເທດ ຊຶ່ງດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະ ຂອງຜູ້ລົງທຶນຮ່ວມ ແມ່ນ ກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບ ຂອງນິຕິບຸກຄົນໃໝ່ດັ່ງກ່າວ.

ສຳລັບ ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນຮູບການດັ່ງກ່າວ ຕ້ອງປະກອບທຶນຢ່າງໜ້ອຍ ບໍ່ໃຫ້ຫຼຸດສິບ ສ່ວນຮ້ອຍ (10%) ຂອງທຶນທັງໝົດ.

## ມາດຕາ 29 (ປັບປຸງ) ການລົງທຶນທຸລະກິດຮ່ວມຕາມສັນຍາ

ການລົງທຶນທຸລະກິດຮ່ວມຕາມສັນຍາ ແມ່ນ ການດຳເນີນທຸລະກິດໃດໜຶ່ງ ຮ່ວມລະຫວ່າງນິຕິບຸກຄົນຕ່າງປະເທດ ກັບນິຕິບຸກຄົນພາຍໃນ ລວມທັງພາກລັດ ແລະ ເອກະຊົນ ໂດຍມີສັນຍາຮ່ວມທຸລະກິດນຳກັນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ບໍ່ຈຳເປັນຕ້ອງ ສ້າງຕັ້ງເປັນນິຕິບຸກຄົນໃໝ່ ຫຼື ສາຂາຂຶ້ນ ຢູ່ ສປປ ລາວ. ສັນຍາດັ່ງກ່າວ ຕ້ອງກຳນົດສິດ, ພັນທະ ແລະ ຜົນປະໂຫຍດຂອງ ແຕ່ລະຝ່າຍຕໍ່ ກັນ ແລະ ກັນ ແລະ ຕໍ່ລັດຖະບານ ຢ່າງຈະແຈ້ງ.

ນິຕິບຸກຄົນພາຍໃນ ທີ່ໄດ້ລົງນາມໃນສັນຍາທຸລະກິດຮ່ວມຕາມສັນຍາດັ່ງກ່າວ ຕ້ອງແຈ້ງໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຮັບຮອງ ແລະ ຄຸ້ມຄອງຕາມລະບຽບການ ແລະ ຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ ຂອງ ສປປ ລາວ ບ່ອນປະຕິບັດສັນຍາ.

## ມາດຕາ 30 (ໃໝ່) ການລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ

ການລົງທຶນຮ່ວມລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ແມ່ນ ການຮ່ວມລົງທຶນລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ ເພື່ອດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ

ສ້າງເປັນນິຕິບຸກຄົນໃໝ່ຂຶ້ນພາຍໃຕ້ກົດໝາຍ ຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະຂອງຜູ້ລົງທຶນຮ່ວມລະຫວ່າງ ລັດວິສາຫະກິດ ແລະ ວິສາຫາກິດເອກະຊົນ ໄດ້ກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບຂອງນິຕິບຸກຄົນໃໝ່ດັ່ງກ່າວ.

**ມາດຕາ 31 (ໃໝ່) ການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ແມ່ນ ກິດຈະການຮ່ວມລົງທຶນລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃຕ້ສັນຍາການລົງທຶນຮ່ວມ ເພື່ອຈັດຕັ້ງປະຕິບັດໂຄງການກໍ່ສ້າງໃໝ່, ປັບປຸງພື້ນຖານໂຄງລ່າງ ຫຼື ສະໜອງການບໍລິການສາທາລະນະ.

ຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນ ການລົງທຶນໃນຮູບການ ການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 32 (ປັບປຸງ) ປະເພດກິດຈະການ ການລົງທຶນ**

ກິດຈະການ ການລົງທຶນ ມີ ສອງ ປະເພດ ດັ່ງນີ້:

1. ກິດຈະການ ການລົງທຶນທົ່ວໄປ;
2. ກິດຈະການ ການລົງທຶນສຳປະທານ.

## ໝວດທີ 2
## ກິດຈະການ ການລົງທຶນທົ່ວໄປ

**ມາດຕາ 33 (ປັບປຸງ) ປະເພດກິດຈະການ ການລົງທຶນທົ່ວໄປ**

ປະເພດກິດຈະການ ການລົງທຶນທົ່ວໄປ ມີ ດັ່ງນີ້:

1. ກິດຈະການ ໃນບັນຊີຄວບຄຸມ;
2. ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ.

**ມາດຕາ 34 (ໃໝ່) ກິດຈະການໃນບັນຊີຄວບຄຸມ**

ກິດຈະການໃນບັນຊີຄວບຄຸມ ແມ່ນ ປະເພດທຸລະກິດ ທີ່ມີຜົນກະທົບ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນຄວາມສົມດຸນ ການພັດທະນາບັນດາຂະແໜງການເສດຖະກິດ ແລະ ສັງຄົມ ຊຶ່ງຕ້ອງໄດ້ຜ່ານການພິຈາລະນາໂດຍບັນດາຂະແໜງການທີ່ກ່ຽວຂ້ອງ ກ່ອນການອະນຸຍາດລົງທຶນຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ/ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ.

ລັດຖະບານ ເປັນຜູ້ກຳນົດບັນຊີກິດຈະການຄວບຄຸມ ໃນແຕ່ລະໄລຍະ.

**ມາດຕາ 35 (ໃໝ່) ກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ**

ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ແມ່ນ ບັນດາກິດຈະການເປີດກວ້າງການລົງທຶນທົ່ວໄປ ທີ່ສາມາດ ແຈ້ງຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດຳເນີນກິດຈະການ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ຂັ້ນຕອນການລົງທຶນໃນກິດຈະການທົ່ວໄປ

**ມາດຕາ 36 (ປັບປຸງ) ການສະເໜີລົງທຶນໃນກິດຈະການ ໃນບັນຊີຄວບຄຸມ**

ຜູ້ລົງທຶນ ທີ່ມີຈຸດປະສົງລົງທຶນໃນກິດຈະການໃນບັນຊີຄວບຄຸມໃຫ້ຍື່ນຄຳຮ້ອງຂໍລົງທຶນ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລ້ວນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 37 (ປັບປຸງ) ກຳນົດເວລາ ພິຈາລະນາຄຳຮ້ອງຂໍລົງທຶນກິດຈະການໃນບັນຊີຄວບຄຸມ**

ການກຳນົດເວລາພິຈາລະນາຄຳຮ້ອງຂໍລົງທຶນກິດຈະການໃນບັນຊີຄວບຄຸມ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ລົງທຶນ ໄດ້ຮັບໃບອະນຸຍາດລົງທຶນ ແລະ ທະບຽນວິສາຫະກິດ ພາຍໃນເວລາ ຊາວຫ້າ ວັນລັດຖະການ ນັບແຕ່ວັນ ຫ້ອງການບໍລິການ ການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນ ເປັນຕົ້ນໄປ;

2. ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານຄຳຮ້ອງຂໍຄຳເຫັນນຳຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພາຍໃນເວລາ ສອງ ວັນລັດຖະການ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນແຈ້ງຕອບເປັນລາຍລັກອັກສອນ ພາຍໃນເວລາບໍ່ເກີນ ແປດ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຄຳຮ້ອງເປັນຕົ້ນໄປ, ຖ້າບໍ່ມີຄຳຕອບພາຍໃນເວລາດັ່ງກ່າວຖືວ່າເປັນການເຫັນດີ;

3. ພາຍຫຼັງມີຄຳເຫັນດີຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງຄົ້ນຄວ້ານຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ພາຍໃນເວລາ ສິບ ວັນລັດຖະການ;

4. ຫຼັງຈາກນັ້ນ ຫ້ອງການບໍລິການ ການລົງທຶນປະຕູດຽວ ອອກໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ ພາຍໃນເວລາ ຫ້າ ວັນລັດຖະການ.

ໃນກໍລະນີ ຄຳຮ້ອງຂໍລົງທຶນ ບໍ່ໄດ້ຮັບການເຫັນດີ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ສະເໜີຂໍລົງທຶນຊາບ ພາຍໃນເວລາ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບການຕົກລົງ.

**ມາດຕາ 38 (ປັບປຸງ) ການສະເໜີລົງທຶນ ໃນກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ**

ຜູ້ລົງທຶນ ທີ່ມີຈຸດປະສົງລົງທຶນໃນກິດຈະການ ບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

ສຳລັບການລົງທຶນໃນກິດຈະການທົ່ວໄປ ຊຶ່ງບໍ່ຢູ່ໃນບັນຊີຄວບຄຸມ ທີ່ນອນໃນກິດຈະການຕາມຂະແໜງການທີ່ສົ່ງເສີມ ພາຍຫຼັງໄດ້ຂຶ້ນທະບຽນວິສາຫະກິດແລ້ວ, ຜູ້ລົງທຶນ ສາມາດຍື່ນຄຳຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຂໍໃບສົ່ງເສີມການລົງທຶນ.

**ມາດຕາ 39 ການພິຈາລະນາຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍ່ຢູ່ໃນບັນຊີຄວບຄຸມ**

ຂັ້ນຕອນ ແລະ ກຳນົດເວລາ ການພິຈາລະນາຂຶ້ນທະບຽນວິສາຫະກິດ ໃນກິດຈະການບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ອອກທະບຽນວິສາຫະກິດ ຢ່າງຊ້າບໍ່ໃຫ້ເກີນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

**ມາດຕາ 40 ອາຍຸການລົງທຶນໃນກິດຈະການທົ່ວໄປ**

ການລົງທຶນໃນກິດຈະການທົ່ວໄປ ບໍ່ຈຳກັດອາຍຸການລົງທຶນ, ເວັ້ນເສຍແຕ່ກິດຈະການລົງທຶນ ທີ່ໄດ້ກຳນົດອາຍຸການລົງທຶນໄວ້ໃນລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ 4
## ກິດຈະການ ການລົງທຶນສຳປະທານ

**ມາດຕາ 41 (ປັບປຸງ) ກິດຈະການ ການລົງທຶນສຳປະທານ**

ກິດຈະການ ການລົງທຶນສຳປະທານ ແມ່ນ ກິດຈະການ ທີ່ຜູ້ລົງທຶນໄດ້ຮັບອະນຸຍາດໃນການສຳປະທານຈາກລັດ ຕາມກົດໝາຍ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເປັນຕົ້ນ ການສຳປະທານທີ່ດິນ, ການພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານໄຟຟ້າ, ການສຳປະທານສາຍການບິນ ແລະ ໂທລະຄົມມະນາຄົມ.

ລັດຖະບານ ເປັນຜູ້ກຳນົດບັນຊີກິດຈະການສຳປະທານ.

**ມາດຕາ 42 (ປັບປຸງ) ອາຍຸການລົງທຶນໃນກິດຈະການສຳປະທານ**

ອາຍຸການລົງທຶນໃນກິດຈະການສຳປະທານ ແມ່ນ ອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດ ບໍ່ໃຫ້ເກີນ ຫ້າສິບ ປີ.

ອາຍຸການລົງທຶນສຳປະທານ ສາມາດຕໍ່ໄດ້ຕາມການຕົກລົງຂອງ ລັດຖະບານ ຫຼື ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5
## ເງື່ອນໄຂ ແລະ ຂັ້ນຕອນການລົງທຶນ ໃນກິດຈະການສຳປະທານ

**ມາດຕາ 43 (ໃໝ່) ເງື່ອນໄຂຂອງຜູ້ລົງທຶນ ໃນກິດຈະການສຳປະທານ**

ຜູ້ລົງທຶນໃນກິດຈະການສຳປະທານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;

2. ມີປະສົບການ ແລະ ໄດ້ຮັບຜົນສຳເລັດທາງດ້ານທຸລະກິດ ໂດຍມີການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ;

3. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;

4. ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 44 (ໃໝ່) ຄຳຮ້ອງ ແລະ ເອກະສານປະກອບການຂໍລົງທຶນ**

ຄຳຮ້ອງ ແລະ ເອກະສານປະກອບການຂໍລົງທຶນ ມີ ດັ່ງນີ້:

1. ຄຳຮ້ອງຂໍລົງທຶນ;

2. ປະຫວັດ ແລະ ປະສົບການ ຂອງຜູ້ລົງທຶນ ຫຼື ບໍລິສັດ, ບັດປະຈຳຕົວ, ໃບແຈ້ງໂທດ, ສຳເນົາໜັງສືເດີນທາງ, ທະບຽນວິສາຫະກິດ ກໍລະນີເປັນນິຕິບຸກຄົນ;

3. ສັນຍາຮ່ວມທຸລະກິດ;

4. ໃບມອບສິດໃຫ້ຜູ້ຕາງໜ້າ ບັນດາຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດ, ໃນກໍລະນີບຸກຄົນດັ່ງກ່າວ ບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ;

5. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນການດຳເນີນທຸລະກິດ ຊຶ່ງກຳນົດເນື້ອໃນຕົ້ນຕໍ ເຊັ່ນ ຈຸດປະສົງການລົງທຶນ, ຄາດຄະເນມູນຄ່າການລົງທຶນ, ທີ່ຕັ້ງໂຄງການ, ກຳນົດເວລາດຳເນີນງານ, ປະສິດທິຜົນຂອງໂຄງການ, ຄວາມຕ້ອງການດ້ານແຮງງານ, ຄວາມຕ້ອງການເຊົ່າ ຫຼື ສຳປະທານທີ່ດິນລັດ, ຄວາມອາດສາມາດເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ການເງິນ, ຄາດຄະເນການແບ່ງຜົນປະໂຫຍດ, ແຜນການ ແລະ ຂັ້ນຕອນການດຳເນີນງານ, ເອກະສານຢັ້ງຢືນການສະໜັບສະໜູນທຶນ, ຂໍ້ສະເໜີດ້ານນະໂຍບາຍການລົງທຶນ;

6. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ;

7. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນ ຈາກສະຖາບັນການເງິນ ຫຼື ທະນາຄານ, ບົດລາຍງານຖານະການເງິນ ທີ່ຜ່ານການຢັ້ງຢືນ ສອງ ປີ ຫຼ້າສຸດ;

8. ກົດລະບຽບບໍລິສັດຕາມຮູບແບບທີ່ກຳນົດ.

**ມາດຕາ 45 (ປັບປຸງ) ການຍື່ນຄຳຮ້ອງຂໍລົງທຶນໃນກິດຈະການສຳປະທານ**

ຜູ້ລົງທຶນ ທີ່ມີຈຸດປະສົງລົງທຶນ ໃນກິດຈະການສຳປະທານ, ການລົງທຶນພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ພ້ອມດ້ວຍເອກະສານຄົບຊຸດ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ.

ລາຍລະອຽດຂອງການປະກອບເອກະສານຄົບຊຸດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 46 (ປັບປຸງ) ກຳນົດເວລາໃນການພິຈາລະນາອະນຸຍາດລົງທຶນໃນກິດຈະການສຳປະທານ**

ກຳນົດເວລາໃນການພິຈາລະນາອະນຸຍາດລົງທຶນ ໃນກິດຈະການສຳປະທານ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ລົງທຶນ ໄດ້ຮັບໃບອະນຸຍາດລົງທຶນ ພາຍໃນເວລາ ຫົກສິບຫ້າວັນ ລັດຖະການ ນັບແຕ່ວັນຫ້ອງການບໍລິການ ການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນ ເປັນຕົ້ນໄປ;

2. ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານຄຳຮ້ອງ ຂໍຄຳເຫັນນຳຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພາຍໃນເວລາ ສອງວັນ ລັດຖະການ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນຕອບຄືນ ພາຍໃນເວລາ ສາມສິບວັນ ລັດຖະການ, ຖ້າບໍ່ມີຄຳຕອບພາຍໃນເວລາດັ່ງກ່າວຖືວ່າເປັນການເຫັນດີ;

3. ພາຍຫຼັງມີຄຳເຫັນຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້າ ນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງດ້ານຫຼັກການ ພາຍໃນເວລາ ສາມສິບວັນ ລັດຖະການ;

4. ພາຍຫຼັງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໄດ້ຕົກລົງດ້ານຫຼັກການແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຈັດກອງປະຊຸມເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບຜູ້ລົງທຶນ ໂດຍມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານຂໍການຕົກລົງ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບ ຜູ້ລົງທຶນ ໂດຍແມ່ນຂະແໜງແຜນການ ແລະ ການລົງທຶນ ຕາງໜ້າໃຫ້ລັດຖະບານລົງນາມໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາດັ່ງກ່າວ.

ຫຼັງຈາກ ເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາແລ້ວ ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ແລະ ດຳເນີນການເກັບກຳຂໍ້ມູນ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ

ຕາມລະບຽບການ.

ໃນກໍລະນີ້ເຫັນດີ ຫ້ອງການບໍລິການ ການລົງທຶນປະຕູດຽວ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນຊາບ ພາຍໃນເວລາ ສາມ ວັນລັດຖະການ, ຜູ້ລົງທຶນຕ້ອງແຈ້ງຕອບເປັນລາຍລັກອັກສອນ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ກ່ຽວກັບວັນເວລາ ທີ່ຈະເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ; ພາຍໃນເວລາ ສາມສິບ ວັນລັດຖະການ ນັບແຕ່ວັນຫ້ອງການບໍລິການ ການລົງທຶນປະຕູດຽວ ອອກແຈ້ງການ, ຖ້າຜູ້ລົງທຶນບໍ່ແຈ້ງຕອບ ຫຼື ບໍ່ເຂົ້າມາເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ຖືວ່າຜູ້ລົງທຶນສະລະສິດໃນການລົງທຶນ.

ພາຍຫຼັງເຊັນສັນຍາສຳປະທານແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ອອກໃບອະນຸຍາດລົງທຶນ ພາຍໃນເວລາ ສາມ ວັນລັດຖະການ.

ໃນກໍລະນີບໍ່ເຫັນດີໃຫ້ລົງທຶນ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນຊາບ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນມີການຕົກລົງ.

**ມາດຕາ 47 (ປັບປຸງ) ການປ່ຽນແປງການລົງທຶນໃນກິດຈະການສຳປະທານ**

ການລົງທຶນ ຈະຖືກປ່ຽນແປງໃນກໍລະນີໃດໜຶ່ງ ເຊັ່ນ ປ່ຽນແປງວັດຖຸປະສົງໃນການດຳເນີນທຸລະກິດ, ຜູ້ຖືຮຸ້ນ, ທຶນຈົດທະບຽນ ແລະ ອື່ນໆ ຕາມການສະເໜີຂອງຜູ້ລົງທຶນ ໂດຍໄດ້ຮັບອະນຸຍາດ ຈາກອົງການທີ່ຕົກລົງອະນຸຍາດ ໃຫ້ລົງທຶນໃນກິດຈະການດັ່ງກ່າວ ຕາມຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ໃໝ່) ການມອບສິດ ຫຼື ໂອນກິດຈະການ ຕາມສັນຍາສຳປະທານ**

ຜູ້ລົງທຶນໃນກິດຈະການສຳປະທານ ສາມາດມອບສິດ ຫຼື ໂອນກິດຈະການ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໃຫ້ຜູ້ລົງທຶນອື່ນໄດ້ ຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງໄດ້ຮັບການຕົກລົງເຫັນດີຈາກລັດຖະບານ ຫຼື ອົງການປົກຄອງ ແຂວງ, ນະຄອນຫຼວງ;

2. ໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂໍ້ 1 ຂອງກົດໝາຍສະບັບນີ້, ປະຕິບັດພັນທະດ້ານການເງິນ ແລະ ພັນທະອື່ນ ຄົບຖ້ວນຕາມສັນຍາ, ກົດໝາຍ ແລະ ລະບຽບການ;

3. ບໍ່ໄດ້ຢູ່ໃນໄລຍະການໄກ່ເກ່ຍ, ຮ້ອງຟ້ອງ ຫຼື ດຳເນີນຄະດີ;

4. ບໍ່ຢູ່ໃນສະພາວະລົ້ມລະລາຍ ຫຼື ຖືກສານຕັດສິນເປັນບຸກຄົນ ຫຼື ນິຕິບຸກຄົນ ລົ້ມລະລາຍ.

ສຳລັບກິດຈະການສຳປະທານໃນ ຂະແໜງບໍ່ແຮ່, ພະລັງງານ, ທີ່ດິນ, ກະສິກຳ-ປ່າໄມ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ກໍລະນີໄດ້ຮັບອະນຸຍາດໃຫ້ ມອບສິດ ຫຼື ໂອນຮຸ້ນ ຕາມສັນຍາ ຈາກຂະແໜງການທີ່ກ່ຽວຂ້ອງນັ້ນ ຕ້ອງແຈ້ງໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຮັບຮອງ ແລະ ຄຸ້ມຄອງ ແລະ ຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ ຂອງ ສປປ ລາວ ບົນພື້ນຖານການປະຕິບັດພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບ

ການ.

## ມາດຕາ 49 (ໃໝ່) ສິດໃນການຮັບຮອງ ຂອງສະພາແຫ່ງຊາດ

ສະພາແຫ່ງຊາດ ມີສິດໃນການຮັບຮອງ ກ່ຽວກັບ ກິດຈະການລົງທຶນ ດັ່ງນີ້:

1. ພິຈາລະນາຮັບຮອງ ທຶນສົມທົບຂອງລັດ ຫຼາຍກວ່າ ຊາວຕື້ ກີບຂຶ້ນໄປ ເຂົ້າຮ່ວມການລົງທຶນໃນກິດຈະການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ເອກະຊົນ;

2. ໂຄງການກໍ່ສ້າງໂຮງງານພະລັງງານນິວເຄຣຍ;

3. ກິດຈະການກາຊີໂນ ແລະ ເກມກາຊີໂນ;

4. ການຕໍ່ອາຍຸສຳປະທານເຂດເສດຖະກິດພິເສດ;

5. ກິດຈະການທີ່ພົວພັນກັບການຫັນປ່ຽນປ່າສະຫງວນ ແລະ ປ່າປ້ອງກັນແຫ່ງຊາດ;

6. ກິດຈະການທີ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ເປັນຕົ້ນ ການຫັນປ່ຽນແລວນ້ຳທຳມະຊາດ, ການຍົກຍ້າຍຈັດສັນປະຊາຊົນ ແຕ່ ຫ້າຮ້ອຍ ຄອບຄົວ ຂຶ້ນໄປ, ການສຳປະທານທີ່ດິນ ແຕ່ ສິບພັນ ເຮັກຕາ ຂຶ້ນໄປ ແລະ ກິດຈະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

7. ໂຄງການທີ່ຕ້ອງການໃຫ້ມີນະໂຍບາຍສິ່ງເສີມພິເສດ.

ນອກຈາກ ໂຄງການ ຫຼື ບັນຫາ ທີ່ໄດ້ກ່າວມາຂ້າງເທິງນີ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

## ມາດຕາ 50 (ໃໝ່) ສິດໃນການຮັບຮອງ ຂອງສະພາປະຊາຊົນຂັ້ນແຂວງ

ສະພາປະຊາຊົນຂັ້ນແຂວງ ມີສິດໃນການຮັບຮອງ ກ່ຽວກັບກິດຈະການລົງທຶນ ດັ່ງນີ້:

1. ຫັນປ່ຽນທີ່ດິນປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູຄືນເອງໄດ້ ແຕ່ ໜຶ່ງຮ້ອຍ ເຮັກຕາລົງມາ ຕາມການສະເໜີຂອງອົງການປົກຄອງ ແຂວງ, ນະຄອນຫຼວງ;

2. ຫັນປ່ຽນທີ່ດິນປ່າປອກໂຫຼ້ນ ແຕ່ ສາມສິບ ຫາ ສອງຮ້ອຍ ເຮັກຕາ ຕໍ່ໜຶ່ງກິດຈະການ ຕາມການສະເໜີຂອງອົງການປົກຄອງ ແຂວງ, ນະຄອນຫຼວງ;

3. ການເຊົ່າ ຫຼື ສຳປະທານທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນເອງ ແຕ່ ໜຶ່ງຮ້ອຍຫ້າສິບ ເຮັກຕາ ລົງມາ ຕໍ່ໜຶ່ງກິດຈະການ ແລະ ກຳນົດເວລາ ເຊົ່າ ຫຼື ສຳປະທານສູງສຸດບໍ່ເກີນ ສາມສິບ ປີ ຕາມການສະເໜີຂອງອົງການປົກຄອງ ແຂວງ, ນະຄອນຫຼວງ;

4. ກິດຈະການທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ໃນລະດັບ ແຂວງ, ນະຄອນຫຼວງ.

ສຳລັບ ກິດຈະການທີ່ຕິດພັນກັບການສຳປະທານທີ່ດິນ, ພະລັງງານໄຟຟ້າ ແລະ ບໍ່ແຮ່ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

## ໝວດທີ 6
## ທຶນຈົດທະບຽນ ແລະ ການນຳເຂົ້າທຶນ

**ມາດຕາ 51 ທຶນຈົດທະບຽນກິດຈະການທົ່ວໄປ**

ທຶນຈົດທະບຽນ ຂອງວິສາຫະກິດໃນກິດຈະການທົ່ວໄປ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍ, ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 52 (ປັບປຸງ) ທຶນຈົດທະບຽນໃນກິດຈະການສຳປະທານ**

ທຶນຈົດທະບຽນໃນກິດຈະການສຳປະທານ ຕ້ອງບໍ່ໃຫ້ຫຼຸດ ສາມສິບ ສ່ວນຮ້ອຍ (30%) ຂອງທຶນທັງໝົດ.

ທຶນຈົດທະບຽນໃນກິດຈະການສຳປະທານ ຕ້ອງກຳນົດໃຫ້ເຫັນຈະແຈ້ງເປັນຊັບສິນ, ໃນຕະຫຼອດໄລຍະການດຳເນີນທຸລະກິດນັ້ນ ມູນຄ່າຊັບສິນຕ້ອງບໍ່ໃຫ້ຫຼຸດທຶນຈົດທະບຽນ.

**ມາດຕາ 53 (ໃໝ່) ການນຳເຂົ້າທຶນໃນກິດຈະການທົ່ວໄປ**

ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນກິດຈະການທົ່ວໄປ ຕ້ອງນຳທຶນເຂົ້າມາຢ່າງໜ້ອຍ ສາມສິບສ່ວນຮ້ອຍ ຂອງທຶນຈົດທະບຽນທັງໝົດ ພາຍໃນກຳນົດເວລາ ເກົ້າສິບ ວັນ ນັບແຕ່ວັນໄດ້ຮັບອະນຸຍາດການລົງທຶນ, ສ່ວນທີ່ຍັງເຫຼືອໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ.

ການນຳເຂົ້າທຶນ ສາມາດປະຕິບັດໄດ້ເປັນ ເງິນ ແລະ/ຫຼື ວັດຖຸ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການນຳເຂົ້າທຶນ ທີ່ເປັນເງິນ ແລະ/ຫຼື ເປັນວັດຖຸ ຕ້ອງນຳເອກະສານມາຢັ້ງຢືນນຳ ທະນາຄານ ແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 54 (ໃໝ່) ການນຳເຂົ້າທຶນຈົດທະບຽນໃນກິດຈະການສຳປະທານ**

ຜູ້ລົງທຶນ ທີ່ລົງທຶນໃນກິດຈະການສຳປະທານ ຕ້ອງນຳທຶນຈົດທະບຽນເຂົ້າມາ ຕາມອັດຕາສ່ວນຕ່ຳສຸດ ດັ່ງນີ້:

1. ສາມສ່ວນຮ້ອຍ (3%) ຂອງທຶນຈົດທະບຽນ ສຳລັບໂຄງການທີ່ມີມູນຄ່າການລົງທຶນຕ່ຳກວ່າສິບ ລ້ານ ໂດລາສະຫະລັດ ລົງມາ;

2. ສອງສ່ວນຮ້ອຍ (2%) ຂອງທຶນຈົດທະບຽນ ສຳລັບໂຄງການທີ່ມີມູນຄ່າການລົງທຶນແຕ່ ສິບລ້ານ ຫາ ຫ້າຮ້ອຍລ້ານ ໂດລາສະຫະລັດ;

3. ໜຶ່ງຈຸດຫ້າສ່ວນຮ້ອຍ (1,5%) ຂອງທຶນຈົດທະບຽນ ສຳລັບໂຄງການທີ່ມີມູນຄ່າການລົງທຶນຫຼາຍ ກວ່າ ຫ້າຮ້ອຍລ້ານ ຫາ ໜຶ່ງຕື້ ໂດລາສະຫະລັດ;

4. ໜຶ່ງສ່ວນຮ້ອຍ (1%) ຂອງທຶນຈົດທະບຽນ ສຳລັບໂຄງການທີ່ມີມູນຄ່າການລົງທຶນຫຼາຍກວ່າ ໜຶ່ງ ຕື້ ໂດລາສະຫະລັດຂຶ້ນໄປ.

ທຶນດັ່ງກ່າວນີ້ ຕ້ອງນຳເຂົ້າພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດການລົງທຶນ, ສ່ວນທີ່ເຫຼືອ ໃຫ້ນຳເຂົ້າມາພາຍໃນ ສອງ ປີ.

ທຶນຈົດທະບຽນດັ່ງກ່າວ ສາມາດນຳໃຊ້ເພື່ອພັດທະນາໂຄງການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 7

## ຫ້ອງການຜູ້ຕາງໜ້າ

### ມາດຕາ 55 (ໃໝ່) ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ

ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ ແມ່ນ ຫ້ອງການປະສານງານຕາງໜ້າໃຫ້ບໍລິສັດແມ່ ໃນການສຶກສາຊ່ອງທາງການລົງທຶນ ແລະ ພົວພັນກັບພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ຢູ່ ສປປ ລາວ.

### ມາດຕາ 56 (ປັບປຸງ) ການສະເໜີສ້າງຕັ້ງຫ້ອງການຜູ້ຕາງໜ້າ

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕ້ອງສະເໜີຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າພາຍ ໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີຂອງບໍລິສັດເປັນຕົ້ນໄປ.

ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ແມ່ນ ເອກະສານຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ ສາມາດເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ການເກັບກຳຂໍ້ມູນດ້ານການລົງທຶນໃຫ້ແກ່ບໍລິສັດແມ່ ເພື່ອເປັນພື້ນຖານໃນການຕັດສິນໃຈລົງທຶນ ຢູ່ ສປປ ລາວ ແຕ່ຫາກບໍ່ມີສິດເຄື່ອນໄຫວດຳເນີນທຸລະກິດ.

ສຳລັບຫຼັກການໃນການສ້າງຕັ້ງ, ການກຳນົດອາຍຸ ແລະ ທຶນສ້າງຕັ້ງ ຂອງຫ້ອງການຜູ້ຕາງໜ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV

## ການພັດທະນາເຂດເສດຖະກິດພິເສດ

### ມາດຕາ 57 (ປັບປຸງ) ເຂດເສດຖະກິດພິເສດ

ເຂດເສດຖະກິດພິເສດ ແມ່ນ ເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນທີ່ນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ນະວັດຕະກຳ ໃນການຜະລິດກະສິກຳເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ ເພື່ອການພັດທະນາແບບຍືນຍົງ, ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດ ຖືກສ້າງຕັ້ງຂຶ້ນໂດຍການຕົກລົງຂອງລັດຖະບານ ປະກອບມີ ນິຄົມອຸດສາຫະກຳ, ການອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ການພັດທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການບໍລິການ, ການຄ້າ, ການທ່ອງທ່ຽວ.

ເຂດເສດຖະກິດພິເສດ ຂຽນຫຍໍ້ວ່າ "ຂສພ" ຂຽນເປັນພາສາອັງກິດ: Special Economic Zone "SEZ".

**ມາດຕາ 58 (ໃໝ່) ການສ້າງຕັ້ງເຂດເສດຖະກິດພິເສດ**

ລັດຖະບານ ຕົກລົງສ້າງຕັ້ງເຂດເສດຖະກິດພິເສດ ຕາມການຄົ້ນຄວ້າສະເໜີ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ໂດຍມີການປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ພາຍຫຼັງ ລັດຖະບານ ຕົກລົງສ້າງເປັນເຂດເສດຖະກິດພິເສດແລ້ວ ຈຶ່ງກຳນົດຮູບການລົງທຶນ ແລະ ຄັດເລືອກຜູ້ພັດທະນາ.

**ມາດຕາ 59 (ປັບປຸງ) ເງື່ອນໄຂການສ້າງຕັ້ງເຂດເສດຖະກິດພິເສດ**

ເຂດເສດຖະກິດພິເສດ ຕ້ອງສ້າງຕັ້ງຕາມເງື່ອນໄຂພື້ນຕົ້ນ ດັ່ງນີ້:

1. ກຳນົດແຈ້ງວັດຖຸປະສົງຂອງເສດຖະກິດພິເສດ;
2. ມີທີ່ຕັ້ງທີ່ເໝາະສົມກັບວັດຖຸປະສົງ, ກຳນົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
3. ກຳນົດອາຍຸສຳປະທານເຂດທີ່ຊັດເຈນ;
4. ກຳນົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
5. ກຳນົດນະໂຍບາຍສົ່ງເສີມທີ່ຈະແຈ້ງ;
6. ຜ່ານການປະເມີນຜົນທາງດ້ານເສດຖະກິດ-ເຕັກນິກ ແລະ ສິ່ງແວດລ້ອມ-ສັງຄົມ;
7. ຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ແລະ ຢູ່ໃນແຜນພັດທະນາຂອງ ລັດຖະບານ, ແຂວງ, ນະຄອນຫຼວງ;
8. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມພາຍໃນເຂດເສດຖະກິດພິເສດ ແລະ ແຂວງ, ນະຄອນຫຼວງ ບ່ອນເຂດເສດຖະກິດຕັ້ງຢູ່;
9. ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນະທຳອັນດີງາມຂອງຊາດ.

**ມາດຕາ 60 (ປັບປຸງ) ຫຼັກການ ການເຄື່ອນໄຫວຂອງເຂດເສດຖະກິດພິເສດ**

ເຂດເສດຖະກິດພິເສດ ເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ສັນຍາສຳປະທານ ແລະ ນະໂຍບາຍສົ່ງເສີມພິເສດ ຕາມກົດໝາຍ;

2. ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນະທຳອັນດີງາມຂອງຊາດ;

3. ຄຸ້ມຄອງ ບໍລິຫານ ຕາມກົນໄກ ການບໍລິການ ການລົງທຶນປະຕູດຽວ ວ່ອງໄວ, ໂປ່ງໃສ;

4. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ພາຍໃນເຂດເສດຖະກິດພິເສດ ແລະ ແຂວງ, ນະຄອນຫຼວງ ບ່ອນເຂດເສດຖະກິດພິເສດຕັ້ງຢູ່.

**ມາດຕາ 61 (ປັບປຸງ) ອາຍຸສຳປະທານທີ່ດິນເພື່ອພັດທະນາເສດຖະກິດພິເສດ**

ອາຍຸສຳປະທານທີ່ດິນ ເພື່ອພັດທະນາເສດຖະກິດພິເສດ ແມ່ນ ອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກ ຂອງກິດຈະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ແຕ່ສູງສຸດ ບໍ່ໃຫ້ເກີນ ຫ້າສິບ ປີ.

ອາຍຸສຳປະທານທີ່ດິນເພື່ອພັດທະນາເສດຖະກິດພິເສດ ສາມາດຕໍ່ໄດ້ຕາມການຕົກລົງຂອງສະພາແຫ່ງຊາດ ຕາມການສະເໜີຂອງ ລັດຖະບານ ບົນພື້ນຖານເງື່ອນໄຂຜູ້ລົງທຶນ ໄດ້ປະຕິບັດສັນຍາສຳປະທານຢ່າງມີປະສິດທິຜົນ ແລະ ໄດ້ນຳຜົນປະໂຫຍດໃຫ້ແກ່ສັງຄົມ.

**ມາດຕາ 62 (ໃໝ່) ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ ແລະ ນະໂຍບາຍອື່ນ**

ຜູ້ພັດທະນາ ແລະ ຜູ້ລົງທຶນໃນເຂດເສດຖະກິດພິເສດ ໄດ້ຮັບນະໂຍບາຍສົ່ງເສີມພິເສດສະເພາະດ້ານພາສີ, ສ່ວຍສາອາກອນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ຜູ້ພັດທະນາ ແລະ ຜູ້ລົງທຶນໃນເຂດເສດຖະກິດພິເສດ ສາມາດປະຕິບັດນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ສັນຍາສຳປະທານ ທີ່ໄດ້ເຊັນກັບລັດຖະບານ.

**ມາດຕາ 63 (ປັບປຸງ) ອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານເຂດເສດຖະກິດພິເສດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ ປະກອບດ້ວຍ:

1. ກະຊວງແຜນການ ແລະ ການລົງທຶນ;
2. ອົງການປົກຄອງ ແຂວງ, ນະຄອນຫຼວງ;
3. ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ;
4. ຄະນະຄຸ້ມຄອງເຂດ.

ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ V
# ການອອກໄປລົງທຶນຢູ່ຕ່າງປະເທດ

**ມາດຕາ 64 (ໃໝ່) ການສະເໜີອອກໄປລົງທຶນຢູ່ຕ່າງປະເທດ ຂອງຜູ້ລົງທຶນພາຍໃນ**

ຜູ້ລົງທຶນພາຍໃນ ທີ່ມີຈຸດປະສົງອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງຍື່ນຄໍາຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດ.

**ມາດຕາ 65 (ໃໝ່) ເງື່ອນໄຂການອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນພາຍໃນ ຈະອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີເປົ້າໝາຍໂຄງການລົງທຶນຢູ່ຕ່າງປະເທດ;

2. ມີໃບຢັ້ງຢືນການກວດສອບບັນຊີການເງິນຄືນຫຼັງ ສອງປີ ຫຼ້າສຸດ ຈາກຂະແໜງການເງິນ ຫຼື ບໍລິສັດກວດສອບເອກະລາດ;

3. ໄດ້ປະຕິບັດພັນທະດ້ານການເງິນຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ຕໍ່ລັດຖະບານ ສປປ ລາວ;

4. ຕ້ອງປະຕິບັດຕາມລະບຽບການຂອງ ທະນາຄານ ແຫ່ງ ສປປ ລາວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 66 (ໃໝ່) ສິດ ແລະ ພັນທະ ຂອງຜູ້ລົງທຶນພາຍໃນ ທີ່ອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນພາຍໃນ ທີ່ອອກໄປລົງທຶນຢູ່ຕ່າງປະເທດ ມີ ສິດ ດັ່ງນີ້:

1. ນໍາເງິນ ແລະ ຊັບສິນອອກໄປລົງທຶນຢູ່ຕ່າງປະເທດ ແລະ ກັບຄືນປະເທດ ພາຍຫຼັງທີ່ໄດ້ປະຕິບັດພັນທະ ຕາມກົດໝາຍ ແລະ ລະບຽບການ ຂອງປະເທດ ທີ່ຕົນລົງທຶນຢູ່;

2. ນໍາເອົາຜົນກໍາໄລ ແລະ ລາຍຮັບອື່ນຈາກການດໍາເນີນທຸລະກິດ ກັບຄືນປະເທດ;

3. ໄດ້ຮັບການອໍານວຍຄວາມສະດວກ ແລະ ນະໂຍບາຍຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

4. ຈ້າງແຮງງານລາວ ເພື່ອເຮັດວຽກຢູ່ວິສາຫະກິດຂອງຕົນຢູ່ຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ຂອງປະເທດທີ່ຕົນໄປລົງທຶນ.

ຜູ້ລົງທຶນພາຍໃນ ທີ່ອອກໄປລົງທຶນຢູ່ຕ່າງປະເທດ ມີ ພັນທະ ດັ່ງນີ້:

1. ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງປະເທດທີ່ຕົນໄປລົງທຶນ;

2. ລາຍງານດ້ານການເງິນ ແລະ ການດໍາເນີນທຸລະກິດຂອງຕົນ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອແຈ້ງໃຫ້ ກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ.

ພາຍຫຼັງສິ້ນສຸດການລົງທຶນຢູ່ຕ່າງປະເທດ ສາມາດນໍາທຶນ ແລະ ຊັບສິນກັບຄືນປະເທດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ VI
# ສິດ ແລະ ພັນທະຂອງຜູ້ລົງທຶນ
## ໝວດທີ 1
## ສິດຂອງຜູ້ລົງທຶນ

**ມາດຕາ 67 (ປັບປຸງ) ສິດຂອງຜູ້ລົງທຶນ**

ສິດຂອງຜູ້ລົງທຶນ ມີ ດັ່ງນີ້:

1. ລົງທຶນໃນທຸກຂະແໜງການ ແລະ ທຸກເຂດລົງທຶນທີ່ບໍ່ຫວງຫ້າມຕາມກົດໝາຍ ຂອງ ສປປ ລາວ;

2. ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

3. ຂໍສຳປະທານໂຄງການນຳລັດຖະບານ ຫຼື ອົງການປົກຄອງ ແຂວງ, ນະຄອນຫຼວງ ຕາມແຕ່ລະກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ;

4. ຂໍສຳປະທານສ້າງຕັ້ງເຂດເສດຖະກິດພິເສດນຳລັດຖະບານ;

5. ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນ ຢູ່ ສປປ ລາວ;

6. ຂໍປ່ຽນວັດຖຸປະສົງ ຫຼື ກິດຈະການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງດ້ານນະໂຍບາຍ, ກົດໝາຍ ແລະ ລະບຽບການ;

7. ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;

8. ໄດ້ຮັບການອຳນວຍຄວາມສະດວກຈາກລັດໃນດ້ານຕ່າງໆ ໃນການລົງທຶນຂອງຕົນ;

9. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການສຳປະທານ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

10. ສຳລັບຜູ້ເຊົ່າ ຫຼື ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ໃຫ້ສືບທອດສັນຍາເຊົ່າທີ່ດິນ ຕາມອາຍຸຂອງສັນຍາ ແລະ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງ ຕຶກ, ອາຄານ ຫຼື ສິ່ງປຸກສ້າງໃນທີ່ດິນທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;

12. ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງ ຢູ່ ສປປ ລາວ;

13. ຍື່ນຄຳຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນ ຖືກອັບປະໂຫຍດໃນການລົງທຶນ;

14. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 68 (ປັບປຸງ) ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ**

ສິດໃນການຄຸ້ມຄອງ, ບໍລິຫານກິດຈະການການລົງທຶນຂອງຕົນ ມີ ດັ່ງນີ້:

1. ວາງແຜນການໃນການລົງທຶນ;

2. ຈັດຫາ ແລະ ນຳໃຊ້ວັດຖຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຊີຕ່າງໆ ເຂົ້າໃນການລົງທຶນ;

3. ເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ;

4. ຄຸ້ມຄອງແຮງງານໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມປອດໄພ ແລະ ມີຄວາມສະດວກໃນການເຄື່ອນໄຫວທຸລະກິດ;

5. ດຳເນີນກອງປະຊຸມ ເພື່ອປຶກສາຫາລືກ່ຽວກັບການລົງທຶນ;

6. ມອບ ຫຼື ໂອນຮຸ້ນ ໃຫ້ຜູ້ລົງທຶນອື່ນ;

7. ຫຼຸດ ຫຼື ເພີ່ມທຶນ ຂອງກິດຈະການການລົງທຶນ;

8. ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາກ່ຽວກັບການຄວບ, ໂຈະ, ຍຸບເລີກ ຫຼື ປ່ຽນຮູບແບບວິສາຫະກິດຂອງຕົນ;

9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 69 (ປັບປຸງ) ສິດໃນການວ່າຈ້າງແຮງງານ**

ສິດໃນການວ່າຈ້າງແຮງງານ ມີ ດັ່ງນີ້:

1. ເຊັນສັນຍາວ່າຈ້າງແຮງງານກັບນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດຂອງຕົນ. ໃນກໍລະນີ ກິດຈະການລົງທຶນຫາກມີຄວາມຈຳເປັນນຳເຂົ້າຜູ້ອອກແຮງງານດ້ານຮ່າງກາຍ ແລະ ມັນສະໝອງເກີນອັດຕາສ່ວນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ຜູ້ລົງທຶນມີສິດສະເໜີຕໍ່ ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຄົ້ນຄວ້າ ແລະ ນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕາມຄວາມເໝາະສົມ;

2. ສັບຊ້ອນ, ຈັດວາງຜູ້ອອກແຮງງານເຂົ້າໃນຕຳແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການ ຂອງວິສາຫະກິດຕົນ;

3. ປະຕິບັດນະໂຍບາຍ ຫຼື ມາດຕະການຕໍ່ຜູ້ອອກແຮງງານ ຢ່າງຖືກຕ້ອງຕາມກົດໝາຍ;

4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 70 ສິດໃນການຢູ່ອາໄສສຳລັບຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນ ສປປ ລາວ ຕາມ

ໄລຍະເວລາຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ມີສິດອາໄສຢູ່ດິນແດນ ຂອງ ສປປ ລາວ ຕາມສັນຍາວ່າຈ້າງແຮງງານ.

### ມາດຕາ 71 (ປັບປຸງ) ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ

ຜູ້ລົງທຶນຕ່າງປະເທດ ມີສິດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນ ກຳໄລຈາກການລົງທຶນ, ເງິນ ແລະ ຊັບສິນຕ່າງໆ ທີ່ເປັນກຳມະສິດສ່ວນຕົວ ຫຼື ຂອງວິສາຫະກິດ ອອກໄປຕ່າງປະເທດ ໂດຍຜ່ານທະນາຄານທີ່ຕັ້ງ ຢູ່ ສປປ ລາວ ແລະ ການຈັດຕັ້ງລັດທີ່ກ່ຽວຂ້ອງ ພາຍຫຼັງທີ່ໄດ້ປະຕິບັດພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມ ໃຫ້ລັດຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ການໂອນຊັບສິນທີ່ເປັນທຶນ ແລະ/ຫຼື ເງິນ ປະກອບດ້ວຍ:

1. ທຶນທີ່ຜ່ານການຢັ້ງຢືນ ຂອງທະນາຄານ ແຫ່ງ ສປປ ລາວ;

2. ກຳໄລ, ເງິນປັນຜົນ, ລາຍຮັບຈາກການໃຫ້ເຊົ່າລິຂະສິດ, ຊັບສິນທາງປັນຍາ, ລາຍຮັບຈາກການບໍລິການດ້ານເຕັກນິກວິຊາການ, ດອກເບັ້ຍ ແລະ ລາຍໄດ້ອື່ນ ຈາກການລົງທຶນ;

3. ເງິນທີ່ໄດ້ຈາກການຂາຍທຸລະກິດ, ຂາຍກິດຈະການ, ຍົກເລີກກິດຈະການທັງໝົດ ຫຼື ສ່ວນໃດໜຶ່ງ;

4. ເງິນທີ່ໄດ້ຮັບຈາກການຊຳລະພາຍໃຕ້ສັນຍາໃດໜຶ່ງ ຊຶ່ງລວມທັງສັນຍາເງິນກູ້, ເງິນທີ່ໄດ້ຈາກຜົນການຕັດສິນຈາກທຸກການໄກ່ເກ່ຍຂໍ້ຂັດແຍ່ງ ຫຼື ການຕັດສິນຈາກສານ ທີ່ອາດພົວພັນ ຫຼື ບໍ່ພົວພັນກັບກິດຈະການ ການລົງທຶນ;

5. ເງິນຊົດເຊີຍ ຫຼື ເງິນຊຳລະອື່ນ ທີ່ໄດ້ຮັບກ່ອນການຮິບຊັບ ຫຼື ການຫັນເປັນຊັບສິນຂອງລັດ;

6. ລາຍໄດ້ ແລະ ເງິນຕອບແທນຂອງພະນັກງານຕ່າງປະເທດ ທີ່ຖືກຈ້າງເຮັດວຽກຢ່າງຖືກຕ້ອງຕາມກົດໝາຍ,

## ໝວດທີ 2
## ພັນທະຂອງຜູ້ລົງທຶນ

### ມາດຕາ 72 (ປັບປຸງ) ພັນທະຕໍ່ລັດ

ຜູ້ລົງທຶນ ມີ ພັນທະຕໍ່ລັດ ດັ່ງນີ້:

1. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ ຂອງ ສປປ ລາວ;

3. ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ;

4. ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;

5. ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາໂຄງການລົງທຶນ;

6. ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ ສາມເດືອນ, ຫົກເດືອນ ແລະ ປະຈຳປີ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 73 (ປັບປຸງ) ພັນທະດ້ານສັງຄົມ**

ຜູ້ລົງທຶນ ມີ ພັນທະດ້ານສັງຄົມ ດັ່ງນີ້:

1. ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກຳມະບານ;

3. ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;

4. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກການນຳເນີນທຸລະກິດຂອງຕົນ;

5. ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;

6. ປະກອບສ່ວນທາງດ້ານງົບປະມານ ໃນວຽກງານພັດທະນາສັງຄົມ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 74 (ປັບປຸງ) ພັນທະດ້ານສິ່ງແວດລ້ອມ**

ຜູ້ລົງທຶນ ມີ ພັນທະດ້ານສິ່ງແວດລ້ອມ ດັ່ງນີ້:

1. ປະຕິບັດພັນທະດ້ານສິ່ງແວດລ້ອມ ຢ່າງເຂັ້ມງວດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;

2. ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ;

3. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

4. ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ VII
# ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ການບໍລິການ ການລົງທຶນປະຕູດຽວ

## ໝວດທີ 1
## ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

### ມາດຕາ 75 (ໃໝ່) ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແມ່ນ ຄະນະກຳມະການ ທີ່ສ້າງຕັ້ງຂຶ້ນ ໂດຍລັດຖະບານ ເພື່ອເຮັດໜ້າທີ່ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຊຶ່ງຂຽນຫຍໍ້ວ່າ “ຄລທ”.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີ ສອງ ຂັ້ນ ຄື:

1. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຂຽນຫຍໍ້ວ່າ “ຄລທ.ສ”;

2. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ຂຽນຫຍໍ້ວ່າ “ຄລທ.ຂ”.

### ມາດຕາ 76 (ໃໝ່) ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;
5. ຮອງລັດຖະມົນຕີ ກະຊວງການເງິນ ເປັນຄະນະ;
6. ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
7. ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
8. ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;

9. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

10. ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

11. ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;

12. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເປີດກອງປະຊຸມ ຢ່າງໜ້ອຍ ເດືອນລະ ສອງ ຄັ້ງ.

**ມາດຕາ 77 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອະນຸຍາດ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ ແລະ ການລົງທຶນພັດທະນາເຂດເສດຖະກິດພິເສດ;

2. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານບໍລິການ ການລົງທຶນປະຕູດຽວ ໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ;

3. ຊີ້ນຳ ການເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ;

4. ຊີ້ນຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາ ທີ່ພົວພັນກັບການລົງທຶນໃນຂັ້ນຄຸ້ມຄອງຂອງຕົນ;

5. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ການລົງທຶນພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47, 86 ແລະ 88 ຂອງກົດໝາຍສະບັບນີ້;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງທຶນ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ລັດຖະບານ ເປັນຜູ້ກຳນົດບັນຊີກິດຈະການ ທີ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາ.

**ມາດຕາ 78 (ໃໝ່) ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ປະກອບດ້ວຍ:

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນປະທານ;

2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນຮອງປະທານ;

3. ຫົວໜ້າພະແນກ ແຜນການ ແລະ ການລົງທຶນ ເປັນຄະນະ ທັງເປັນຜູ້ປະຈຳການ;

4. ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ເປັນຄະນະ;

5. ຫົວໜ້າພະແນກ ການເງິນ ເປັນຄະນະ;

6. ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;

7. ຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

8. ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ເປັນຄະນະ;

9. ຫົວໜ້າພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

10. ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

11. ຫົວໜ້າພະແນກ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;

12. ຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ເປັນຄະນະ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ເປີດກອງປະຊຸມ ຢ່າງໜ້ອຍ ເດືອນລະ ສອງ ຄັ້ງ.

**ມາດຕາ 79 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດ ຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ພິຈາລະນາອະນຸຍາດ ການລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ ຕາມການແບ່ງຂັ້ນຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ;

2. ຊີ້ນຳການຈັດຕັ້ງປະຕິບັດ ວຽກງານບໍລິການ ການລົງທຶນປະຕູດຽວໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ;

3. ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສັນຍາ ທີ່ພົວພັນກັບການລົງທຶນໃນຂັ້ນຄຸ້ມຄອງຂອງຕົນ;

4. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ຍົກເລີກ ການລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ ຕາມຂັ້ນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47, 86 ແລະ 88 ຂອງກົດໝາຍສະບັບນີ້;

5. ຊີ້ນຳການເຄື່ອນໄຫວ ຂອງ ຄະນະຄຸ້ມຄອງເຂດ ແລະ ຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງ ຢ່າງ ເປັນປະຈຳ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມການລົງທຶນ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການບໍລິການ ການລົງທຶນປະຕູດຽວ

### ມາດຕາ 80 (ໃໝ່) ຫ້ອງການບໍລິການ ການລົງທຶນປະຕູດຽວ

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂຽນຫຍໍ້ວ່າ “ຫລປ” ແມ່ນ ຫ້ອງການປະຈຳການ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອປະຕິບັດໜ້າທີ່ການບໍລິການ ການລົງທຶນຜ່ານປະຕູດຽວ ໃຫ້ແກ່ຜູ້ລົງທຶນ ຢູ່ ສປປ ລາວ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້.

ຫ້ອງການບໍລິການ ການລົງທຶນປະຕູດຽວ ມີ ສອງ ຂັ້ນ ຄື:

1. ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຂຽນຫຍໍ້ວ່າ "ຫລປ.ສ";

2. ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ຂຽນຫຍໍ້ວ່າ "ຫລປ.ຂ".

### ມາດຕາ 81 (ໃໝ່) ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຕັ້ງຢູ່ກະຊວງແຜນການ ແລະ ການລົງທຶນ ໂດຍມີຄະນະວິຊາການຮັບຜິດຊອບ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ.

ແຕ່ລະກະຊວງ, ອົງການລັດທຽບເທົ່າກະຊວງ ມີໜ້າທີ່ສ້າງຕັ້ງໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ປະຈຳອົງການຂອງຕົນ ໂດຍພາຍໃຕ້ການຊີ້ນຳຂອງ ລັດຖະມົນຕີ ຫຼື ຮອງລັດຖະມົນຕີ ຂອງກະຊວງກ່ຽວຂ້ອງ ທີ່ເປັນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

ລັດຖະບານ ເປັນຜູ້ກຳນົດລະບຽບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງໜ່ວຍງານປະສານງານການບໍລິການປະຕູດຽວ ຂັ້ນສູນກາງ ແລະ ຂັ້ນແຂວງ.

**ມາດຕາ 82 (ໃໝ່) ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ**

ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ຕັ້ງຢູ່ພະແນກແຜນການ ແລະ ການລົງທຶນ ໂດຍມີຄະນະວິຊາການຮັບຜິດຊອບ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກ ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກການເງິນ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ກອງບັນຊາການປ້ອງກັນຄວາມສະຫງົບ.

ແຕ່ລະພະແນກຂັ້ນແຂວງ ມີໜ້າທີ່ສ້າງຕັ້ງໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ປະຈຳພະແນກຂອງຕົນ ໂດຍພາຍໃຕ້ການຊີ້ນຳຂອງ ຫົວໜ້າພະແນກກ່ຽວຂ້ອງທີ່ເປັນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ.

**ມາດຕາ 83 (ປັບປຸງ) ຫຼັກການບໍລິການ ການລົງທຶນປະຕູດຽວ**

ຫຼັກການບໍລິການ ການລົງທຶນປະຕູດຽວ ມີ ດັ່ງນີ້:

1. ເປັນສູນລວມການບໍລິການ ການລົງທຶນ ໃຫ້ແກ່ຜູ້ລົງທຶນ ທີ່ລົງທຶນໃນກິດຈະການທົ່ວໄປ, ສຳປະທານ ແລະ ການພັດທະນາເຂດເສດຖະກິດພິເສດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ທັນການ;

2. ເປັນເຈົ້າການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;

3. ລວມສູນການເກັບກຳຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດ, ສັງລວມຕີລາຄາປະເມີນຜົນສະພາບການລົງທຶນ ແລະ ໂຄງການລົງທຶນຂອງພາກເອກະຊົນ.

**ມາດຕາ 84 (ໃໝ່) ສິດ ແລະ ໜ້າທີ່ ຂອງ ຫ້ອງການບໍລິການການລົງທຶນປະຕູດຽວ**

ຫ້ອງການບໍລິການ ການລົງທຶນປະຕູດຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອະທິບາຍຊີ້ແຈງ ດ້ານກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ກັບວຽກງານລົງທຶນໃຫ້ແກ່ຜູ້ລົງທຶນ;

2. ຮັບຄຳຮ້ອງຂໍລົງທຶນ ທີ່ລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ;

3. ສົ່ງເອກະສານຄຳຮ້ອງ ຂໍຄຳເຫັນນຳຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ;

4. ຄົ້ນຄວ້າການສະເໜີຂໍລົງທຶນຂອງຜູ້ລົງທຶນ ເພື່ອນຳສະເໜີຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງ;

5. ຈັດກອງປະຊຸມວິຊາການປະຈຳອາທິດ ເພື່ອພິຈາລະນາຄຳຮ້ອງຂໍລົງທຶນ;

6. ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອອອກທະບຽນວິສາຫະກິດ, ທະບຽນອາກອນ,

ໃບອະນຸຍາດດຳເນີນກິດຈະການ ແລະ ໃບອະນຸຍາດອື່ນ ຕາມກົດໝາຍ ແລະ ລະບຽບການ ພາຍຫຼັງໄດ້ຮັບອະນຸຍາດຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

7. ອຳນວຍຄວາມສະດວກທາງດ້ານເອກະສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບການລົງທຶນໃຫ້ແກ່ນັກລົງທຶນ ໂດຍປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງ;

8. ອະທິບາຍ ແລະ ແນະນຳການປະກອບເອກະສານ ຕາມແບບພິມທີ່ໄດ້ກຳນົດໄວ້ ແລະ ເອກະສານຕ່າງໆກ່ຽວກັບວຽກງານລົງທຶນ;

9. ຮັບຄຳຮ້ອງ ແລະ ຄົ້ນຄວ້າກ່ຽວກັບ ການປ່ຽນແປງເນື້ອໃນສັນຍາສຳປະທານ, ໃບອະນຸຍາດລົງທຶນ, ການປ່ຽນແປງເນື້ອໃນທະບຽນວິສາຫະກິດ ທີ່ຕິດພັນກັບການເພີ່ມ ຫຼື ຫຼຸດກິດຈະການໃນບັນຊີຄວບຄຸມ;

10. ຮັບ ແລະ ບໍລິການຄຳຮ້ອງຂໍວີຊາ, ບັດແຮງງານ ແລະ ບັດອະນຸຍາດພັກເຊົາ ຂອງຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍ ຄອບຄົວ, ນັກວິຊາການ ແລະ ແຮງງານຕ່າງປະເທດ;

11. ຮັບຄຳຮ້ອງ, ຄຳສະເໜີ ກ່ຽວກັບຂໍ້ຂັດແຍ່ງຂອງຜູ້ລົງທຶນ ແລະ ປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂບັນຫາດັ່ງກ່າວ;

12. ໃຫ້ການຊ່ວຍເຫຼືອເບື້ອງຕົ້ນ ໃນການແກ້ໄຂບັນຫາ ຫຼື ຂໍ້ສະເໜີ ທີ່ພົວພັນກັບການລົງທຶນໂດຍມີການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;

13. ໃຫ້ບໍລິການດ້ານຕ່າງໆ ທີ່ກ່ຽວຂ້ອງກັບວຽກງານລົງທຶນແກ່ນັກລົງທຶນ ຕາມກົດໝາຍ ແລະ ລະບຽບການ;

14. ຕິດຕາມ, ກວດກາ ການລົງທຶນ ແລ້ວລາຍງານຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມຄວາມຮັບຜິດຊອບຂອງຕົນ ໃນແຕ່ລະໄລຍະ;

15. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ.

## ພາກທີ VIII
## ການໂຈະ, ຍົກເລີກ ແລະ ສິ້ນສຸດການລົງທຶນ

### ມາດຕາ 85 (ປັບປຸງ) ການໂຈະການລົງທຶນ

ການລົງທຶນ ຈະຖືກໂຈະການເຄື່ອນໄຫວຊົ່ວຄາວ ໂດຍອົງການທີ່ອະນຸຍາດລົງທຶນ ແລະ ອອກທະບຽນວິສາຫະກິດ ດັ່ງນີ້:

1. ຕາມການສະເໜີຂອງຜູ້ລົງທຶນ;

2. ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຍ້ອນບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 86 (ປັບປຸງ) ຂັ້ນຕອນການໂຈະການລົງທຶນ**

ການໂຈະຕາມການສະເໜີຂອງຜູ້ລົງທຶນ: ອົງການທີ່ອະນຸຍາດລົງທຶນ ແລະ ອອກທະບຽນວິສາຫະກິດ ຕ້ອງປະສານງານກັບຂະແໜງການກ່ຽວຂ້ອງ ເພື່ອກວດກາປະເມີນຜົນກ່ອນການພິຈາລະນາອະນຸຍາດໃຫ້ໂຈະ.

ການໂຈະຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ: ອົງການທີ່ອະນຸຍາດລົງທຶນ ແລະ ອອກທະບຽນວິສາຫະກິດ, ປຶກສາຫາລື ແລະ ແຈ້ງເຕືອນເປັນລາຍລັກອັກສອນ ໂດຍມີກຳນົດເວລາ ເພື່ອໃຫ້ຜູ້ລົງທຶນແກ້ໄຂ ຫຼື ປັບປຸງໃຫ້ຖືກຕ້ອງ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ຕາມກຳນົດເວລາທີ່ໄດ້ຕົກລົງກັນ ການລົງທຶນດັ່ງກ່າວ ກໍຈະຖືກສັ່ງໃຫ້ໂຈະ.

**ມາດຕາ 87 (ປັບປຸງ) ການຍົກເລີກການລົງທຶນ**

ການລົງທຶນ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ລົງທຶນ ຫຼື ຄູ່ສັນຍາຝ່າຍໃດຝ່າຍໜຶ່ງໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ກົດໝາຍ ແລະ ລະບຽບການ;

2. ບໍ່ສາມາດແກ້ໄຂໄດ້ຕາມເງື່ອນໄຂທີ່ກຳນົດໄວ້ໃນມາດຕາ 86 ວັກສອງ ຂອງກົດໝາຍສະບັບນີ້;

3. ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ໃຫ້ຍົກເລີກການລົງທຶນ;

5. ມີການລົ້ມລະລາຍ ຕາມກົດໝາຍ;

ໃນກໍລະນີມີການຍົກເລີກການລົງທຶນ ຈະບໍ່ພາໃຫ້ຜູ້ລົງທຶນພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບູກຄົນ, ນິຕິບຸກຄົນ ແລະ ຕໍ່ລັດ.

**ມາດຕາ 88 (ປັບປຸງ) ຂັ້ນຕອນການຍົກເລີກການລົງທຶນ**

ຂັ້ນຕອນການຍົກເລີກການລົງທຶນ ມີດັ່ງນີ້:

1. ອົງການທີ່ອະນຸຍາດ ເປັນຜູ້ອອກໜັງສືແຈ້ງຍົກເລີກການລົງທຶນ;

2. ໃຫ້ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

**ມາດຕາ 89 (ປັບປຸງ) ການສິ້ນສຸດການລົງທຶນ**

ການລົງທຶນ ຈະສິ້ນສຸດ ໃນກໍລະນີ ດັ່ງນີ້:

1. ໝົດອາຍຸການລົງທຶນຕາມທີ່ໄດ້ກໍານົດໄວ້ໃນໃບອະນຸຍາດລົງທຶນ ຫຼື ໂຄງການລົງທຶນໄດ້ປະຕິບັດສໍາເລັດແລ້ວ;

2. ມີການຖອນໃບອະນຸຍາດລົງທຶນ ຫຼື ຖືກຍົກເລີກການລົງທຶນຕາມມາດຕາ 87 ຂອງກົດໝາຍສະບັບນີ້;

3. ໄດ້ດໍາເນີນການຍຸບເລີກວິສາຫະກິດຕາມຂັ້ນຕອນທີ່ໄດ້ກໍານົດໃນກົດໝາຍວ່າດ້ວຍວິສາຫະກິດ;

4. ຍົກເລີກ ຕາມການສະເໜີຂອງຜູ້ລົງທຶນ ຫຼື ຄູ່ສັນຍາ ໂດຍມີການຢັ້ງຢືນຂອງຂະແໜງການທີ່ກ່ຽວຂ້ອງ;

5. ມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍຸບເລີກວິສາຫະກິດ ຫຼື ຍົກເລີກກິດຈະການການລົງທຶນ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 90 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີ ພຶດຕິກໍາ ດັ່ງນີ້:

1. ອະນຸຍາດ, ດໍາເນີນທຸລະກິດທີ່ຫວງຫ້າມ ຫຼື ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. ຂັດຂວາງການສົ່ງເສີມການລົງທຶນ ຢູ່ ສປປ ລາວ ໃນທຸກຮູບການ;

3. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 91 (ປັບປຸງ) ຂໍ້ຫ້າມສໍາລັບພະນັກງານ**

ຫ້າມພະນັກງານ ມີ ພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ສົມຮູ້ຮ່ວມຄິດ ຫຼື ເອື້ອອໍານວຍຄວາມສະດວກໃຫ້ຜູ້ລົງທຶນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດທີ່ຂັດກັບກົດໝາຍ ແລະ ລະບຽບການ;

3. ຮັບສິນບົນຈາກຜູ້ລົງທຶນ ຫຼື ຜູ້ທີ່ຫວັງຜົນປະໂຫຍດຈາກການລົງທຶນ;

4. ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຂອງຜູ້ລົງທຶນ;

5. ແກ່ຍາວເວລາ ຫຼື ກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງທຶນ ໂດຍບໍ່ມີເຫດຜົນ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 92 (ປັບປຸງ) ຂໍ້ຫ້າມສໍາລັບຜູ້ລົງທຶນ**

ຫ້າມ ຜູ້ລົງທຶນ ມີ ພຶດຕິກໍາ ດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;

2. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່ ແລະ ພະນັກງານລັດ ເພື່ອໃຫ້ໄດ້ມາ ຊຶ່ງຜົນປະໂຫຍດທີ່ຂັດກັບກົດໝາຍ ແລະ ລະບຽບການ;

3. ຜູ້ລົງທຶນຕ່າງປະເທດ ຊື້-ຂາຍ ທີ່ດິນ, ຍົກເວັ້ນການເຊົ່າ ຫຼື ສໍາປະທານທີ່ດິນຈາກລັດ;

4. ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອໍາ, ປິດບັງລາຍຮັບ, ກໍາໄລ ແລະ ຊຸກເຊື່ອງການກະທໍາຜິດທີ່ຕິດພັນກັບການເສຍພາສີ, ອາກອນ;

5. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;

6. ກະທໍາ ຫຼື ເຄື່ອນໄຫວໃດໆ ທີ່ມີຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທໍາຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຂອງຊາດ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ພາກທີ X
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 93 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການລົງທຶນ ສາມາດດໍາເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມກັນ;

2. ການແກ້ໄຂທາງດ້ານບໍລິຫານ;

3. ການແກ້ໄຂໂດຍ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ ຫຼື ຕ່າງປະເທດທີ່ ສປປ ລາວ ເປັນພາຄີ;

4. ການຮ້ອງຟ້ອງຕໍ່ສານພາຍໃນ ຫຼື ຕ່າງປະເທດ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 94 (ປັບປຸງ) ການແກ້ໄຂດ້ວຍການປະນີປະນອມກັນ**

ໃນກໍລະນີ ທີ່ມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີຕ້ອງດໍາເນີນການແກ້ໄຂຂໍ້ຂັດແຍ່ງນໍາກັນໂດຍສັນຕິວິທີ, ປະນີປະນອມກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທໍາ.

**ມາດຕາ 95 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງ ສາມາດສະເໜີຂໍ້

ຂັດແຍ່ງ ຜ່ານຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 96 (ປັບປຸງ) ການແກ້ໄຂໂດຍ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວ ເປັນພາຄີ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ຫຼື ຕ່າງປະເທດ ທີ່ສອງຝ່າຍຕົກລົງນຳກັນໃນສັນຍາ.

ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໂດຍໄດ້ຮັບການຢັ້ງຢືນ ຈາກສານປະຊາຊົນ ຂອງ ສປປ ລາວ.

ສານປະຊາຊົນ ຂອງ ສປປ ລາວ ຈະພິຈາລະນາຢັ້ງຢືນຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຄູ່ກໍລະນີ ຕ້ອງຖືສັນຊາດຂອງປະເທດ ທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ;

2. ບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;

3. ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນ ຢູ່ ສປປ ລາວ,

ພາຍຫຼັງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ຖືກຮັບຮູ້ ແລະ ຢັ້ງຢືນຈາກສານປະຊາຊົນ ຂອງ ສປປ ລາວ ແລ້ວ ກໍໃຫ້ຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ.

ສຳລັບ ການແກ້ໄຂຂໍ້ຂັດແຍ່ງການລົງທຶນທີ່ໄດ້ມີສັນຍາກັບລັດຖະບານ ໃຫ້ປະຕິບັດຕາມສອງຝ່າຍທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 97 (ປັບປຸງ) ການຮ້ອງຟ້ອງຕໍ່ສານ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວ ເປັນພາຄີ**

ໃນກໍລະນີ ເກີດມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ຕາມກົດໝາຍ ຂອງ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວ ເປັນພາຄີ. ເມື່ອມີຄຳຕັດສິນຂອງສານທີ່ໃຊ້ໄດ້ ຢ່າງເດັດຂາດແລ້ວ ໃຫ້ມີຜົນສັກສິດບັງຄັບປະຕິບັດຕໍ່ຄູ່ກໍລະນີ.

# ພາກທີ XI
# ການຄຸ້ມຄອງ ແລະ ການກວດກາວຽກງານສົ່ງເສີມການລົງທຶນ
## ໝວດທີ 1
## ການຄຸ້ມຄອງວຽກງານສົ່ງເສີມການລົງທຶນ

**ມາດຕາ 98 (ປັບປຸງ) ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 99 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຂະແໜງການແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ**

1. ຄົ້ນຄວ້າ, ສ້າງ ແລະ ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຢູ່ ສປປ ລາວ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ;

2. ສ້າງ ແລະ ປະກາດໃຊ້ບັນດາແບບພິມ ທີ່ພົວພັນກັບການຂໍອະນຸຍາດລົງທຶນ ຢູ່ ສປປ ລາວ ຫຼື ການອອກໄປລົງທຶນຢູ່ຕ່າງປະເທດ;

3. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາສຳປະທານ ແລະ ຕາງໜ້າໃຫ້ລັດຖະບານລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍຂອງລັດຖະບານ;

4. ຄົ້ນຄວ້າ ແລະ ນຳສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ;

6. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍກ່ຽວກັບການສົ່ງເສີມການລົງທຶນໃນຂອບເຂດທົ່ວປະເທດ;

7. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນຂອບເຂດທົ່ວປະເທດ ລວມທັງການຄຸ້ມຄອງ ຜູ້ລົງທຶນພາຍໃນທີ່ໄປລົງທຶນຢູ່ຕ່າງປະເທດ;

8. ຊີ້ນຳ ແລະ ອຳນວຍຄວາມສະດວກ ໃນການດຳເນີນການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

9. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

11. ຄຸ້ມຄອງວຽກງານເຂດເສດຖະກິດພິເສດ;

12. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານສົ່ງເສີມການລົງທຶນຕໍ່ລັດຖະບານຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ສິດ ແລະ ໜ້າທີ່ ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ**

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ;

2. ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນຕາມຄວາມຮັບຜິດຊອບ ໃນທ້ອງຖິ່ນຂອງຕົນ;

3. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາສຳປະທານ ແລະ ຕາງໜ້າໃຫ້ແຂວງລົງນາມໃນສັນຍາດັ່ງກ່າວ ຕາມການມອບໝາຍ;

4. ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ, ກິດຈະການ ລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນ;

5. ປະສານສົມທົບກັບບັນດາຂະແໜງການທ້ອງຖິ່ນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນທ້ອງຖິ່ນຕົນ;

6. ຄົ້ນຄ້ວາ ແລະ ນຳສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

7. ອຳນວຍຄວາມສະດວກ ໃນການດຳເນີນການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມການລົງທຶນ ຕາມການມອບໝາຍ ຂອງຂັ້ນເທິງ;

9. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

10. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານສົ່ງເສີມການລົງທຶນ ຕໍ່ ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ ຂອງຫ້ອງການ ແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ**

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມການລົງທຶນ ຕາມຄວາມຮັບຜິດຊອບຂອງຕົນ;

2. ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນຕາມຄວາມຮັບຜິດຊອບຂອງຕົນ;

3. ຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ, ກິດຈະການ ລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນຕາມຄວາມຮັບຜິດຊອບຂອງຕົນ;

4. ປະສານສົມທົບກັບບັນດາຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ແລະ ກິດຈະການລົງທຶນ;

5. ອຳນວຍຄວາມສະດວກ, ສະໜັບສະໜູນການເຄື່ອນໄຫວວຽກງານການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ ຕາມຄວາມຮັບຜິດຊອບຂອງຕົນ;

6. ເກັບກຳຂໍ້ມູນກ່ຽວກັບການລົງທຶນ ລວມທັງກິດຈະການການລົງທຶນຕ່າງໆ ຢູ່ໃນເມືອງ, ເທດສະບານ, ນະຄອນ;

7. ສະເໜີການສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມການລົງທຶນ;

8. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານສົ່ງເສີມການລົງທຶນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 100 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການ ອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຂະແໜງການອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

1. ຄົ້ນຄວ້າທິດທາງ, ນະໂຍບາຍການພັດທະນາ ແລະ ການສົ່ງເສີມວິສາຫະກິດ ພ້ອມທັງເປັນເຈົ້າການໃນການຈັດຕັ້ງຜັນຂະຫຍາຍທິດທາງ ນະໂຍບາຍດັ່ງກ່າວ ໃນຂອບເຂດທົ່ວປະເທດ;

2. ຄຸ້ມຄອງການມີຕົວຕົນ ແລະ ການຈັດຕັ້ງທຸລະກິດຂອງທຸກປະເພດວິສາຫະກິດ ໃນຂັ້ນຄຸ້ມຄອງຂອງຕົນ ນັບແຕ່ຂອດສ້າງຕັ້ງໄປຈົນເຖິງຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

3. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການ ຕໍ່ວິສາຫະກິດທີ່ລະເມີດ ກົດໝາຍ ແລະ ລະບຽບການ;

4. ບໍລິການຂຶ້ນທະບຽນວິສາຫະກິດໃນທຸກກິດຈະການ;

5. ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ ແລະ ສາຂາວິສາຫະກິດຕ່າງປະເທດ;

6. ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ, ຍົກເວັ້ນການເພີ່ມ ຫຼື ຫຼຸດກິດຈະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້;

7. ຊຸກຍູ້ ແລະ ຊີ້ນຳວຽກງານການພັດທະນາ ແລະ ສົ່ງເສີມວິສາຫະກິດ ຂັ້ນທ້ອງຖິ່ນ;

8. ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ສາທາລະນະຊົນ;

9. ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນ ກ່ຽວກັບການ ດຳເນີນທຸລະກິດ;

10. ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

11. ຖອນທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

12. ສັ່ງໃຫ້ປ່ຽນແປງ ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດ ທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນທ້ອງຖິ່ນ;

13. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ລັດຖະບານຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

1. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍການພັດທະນາ ແລະ ການສົ່ງເສີມວິສາຫະກິດ;

2. ຄຸ້ມຄອງການມີຕົວຕົນ ແລະ ການຈັດຕັ້ງທຸລະກິດຂອງທຸກປະເພດວິສາຫະກິດ ນັບແຕ່ຂອດສ້າງຕັ້ງໄປຈົນເຖິງຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

3. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການ ຕໍ່ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ບໍລິການຂຶ້ນທະບຽນວິສາຫະກິດໃນທຸກກິດຈະການ;

5. ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ;

6. ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ;

7. ຊຸກຍູ້ ແລະ ຊີ້ນຳວຽກງານການພັດທະນາ ແລະ ສົ່ງເສີມວິສາຫະກິດ ເມືອງ, ເທດສະບານ, ນະຄອນ;

8. ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ສາທາລະນະຊົນ;

9. ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນ ກ່ຽວກັບການ ດຳເນີນທຸລະກິດ;

10. ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

11. ຖອນທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

12. ສັ່ງໃຫ້ປ່ຽນແປງ, ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດ ທີ່ບໍ່ຖືກຕ້ອງຂອງເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນເມືອງ;

13. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ ຂັ້ນເທິງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ**

1. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍການພັດທະນາ ແລະ ການສົ່ງເສີມວິສາຫະກິດ;

2. ຄຸ້ມຄອງການມີຕົວຕົນ ແລະ ການຈັດຕັ້ງທຸລະກິດຂອງທຸກປະເພດວິສາຫະກິດ ນັບແຕ່ຂອດສ້າງຕັ້ງໄປຈົນເຖິງຂອດຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

3. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງ ແລະ ນຳໃຊ້ມາດຕະການ ຕໍ່ວິສາຫະກິດທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ບໍລິການຂຶ້ນທະບຽນວິສາຫະກິດໃນທຸກກິດຈະການ;

5. ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ;

6. ຮັບຄຳຮ້ອງປ່ຽນແປງເນື້ອໃນທະບຽນວິສາຫະກິດ;

7. ເກັບກຳ, ປົກປັກຮັກສາ ແລະ ບໍລິການສະໜອງຂໍ້ມູນວິສາຫະກິດ ໃຫ້ແກ່ຂັ້ນເທິງ ແລະ ສາທາລະນະຊົນ;

8. ແຈ້ງເຊີນວິສາຫະກິດເຂົ້າພົບ ເພື່ອອະທິບາຍເຫດຜົນ ຫຼື ແນະນຳຕັກເຕືອນ ກ່ຽວກັບການດຳເນີນທຸລະກິດ;

9. ສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຫຼື ຖາວອນ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

10. ຖອນທະບຽນວິສາຫະກິດຖາວອນ ຫຼື ລຶບຊື່ວິສາຫະກິດອອກຈາກບັນຊີທະບຽນວິສາຫະກິດ ຕໍ່ວິສາຫະກິດໃນຂັ້ນຄຸ້ມຄອງຂອງຕົນ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

11. ສັ່ງໃຫ້ປັບປຸງແປງ, ໂຈະ ຫຼື ລຶບລ້າງທະບຽນວິສາຫະກິດ ທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນຂອງຕົນ;

12. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 101 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການການເງິນ**

ໃນການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຂະແໜງການການເງິນ ມີ ສິດ ແລະ ໜ້າທີ່ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳ ກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ;

2. ຄົ້ນຄ້ວາ, ປະກອບຄຳເຫັນ ຕໍ່ການຂໍອະນຸຍາດ ການລົງທຶນ, ຕໍ່ອາຍຸສັນຍາ ແລະ ການປັບປຸງແປງເນື້ອໃນສັນຍາ;

3. ຊຸກຍູ້, ແນະນຳ, ເຜີຍແຜ່, ຕິດຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນໃຫ້ນັກລົງທຶນ ແລະ ພາກສ່ວນກ່ຽວຂ້ອງ;

4. ຊຸກຍູ້, ສົ່ງເສີມ, ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການການລົງທຶນ, ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍ ດ້ານພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

5. ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນຂອບເຂດທົ່ວປະເທດ;

6. ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປັບປຸງແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ; ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

7. ສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ ຢູ່ ສປປ ລາວ;

9. ຈັດຕັ້ງປະຕິບັດນະໂຍບາຍການສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

10. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ ຂັ້ນເທິງຢ່າງເປັນປົກກະຕິ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ສິດ ແລະ ໜ້າທີ່ ຂອງພະແນກການເງິນ ແຂວງ, ນະຄອນຫຼວງ**

1. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບຂະແໜງການເງິນທີ່ຕິດພັນກັບການສົ່ງເສີມການລົງທຶນ;

2. ຄົ້ນຄ້ວາ, ປະກອບຄໍາເຫັນ ຕໍ່ການຂໍອະນຸຍາດການລົງທຶນ, ຕໍ່ອາຍຸສັນຍາ ແລະ ປ່ຽນແປງເນື້ອໃນສັນຍາ;

3. ຊຸກຍູ້, ແນະນໍາ, ເຜີຍແຜ່, ຕິດຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍກ່ຽວກັບຂະແໜງການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນໃຫ້ນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4. ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການການລົງທຶນ, ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍ ດ້ານພາສີ, ອາກອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

5. ປະສານສົມທົບກັບ ພະແນກແຜນການ ແລະ ການລົງທຶນ, ພະແນກການ, ອົງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ;

6. ສະເໜີພາກສ່ວນກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ການລົງທຶນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດບໍ່ໄປຕາມສັນຍາ; ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

7. ສະເໜີສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການເງິນ ທີ່ຕິດພັນກັບການສົ່ງເສີມການລົງທຶນ ຢູ່ ສປປ ລາວ ຕາມການມອບໝາຍຂອງຂັ້ນເທິງ;

9. ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

10. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ ຂອງຫ້ອງການການເງິນ ເມືອງ, ເທດສະບານ, ນະຄອນ**

1. ຈັດຕັ້ງປະຕິບັດ ແຜນນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ກ່ຽວກັບຂະແໜງການການເງິນທີ່ຕິດພັນກັບວຽກງານສົ່ງເສີມການລົງທຶນ;

2. ແນະນໍາ, ເຜີຍແຜ່ນະໂຍບາຍກົດໝາຍ ແລະ ລະບຽບການ ກ່ຽວກັບຂະແໜງການການເງິນທີ່ຕິດພັນກັບວຽກງານສົ່ງເສີມການລົງທຶນ;

3. ຊຸກຍູ້, ສົ່ງເສີມ, ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການ, ກິດຈະການການລົງທຶນ ພ້ອມທັງຕິດຕາມ ແລະ ຄຸ້ມຄອງນະໂຍບາຍ ດ້ານພາສີ, ອາກອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

4. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ, ນະຄອນຂອງຕົນ ໃນການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ແລະ ກິດຈະການການລົງທຶນ;

5. ສະເໜີພາກສ່ວນທີ່ກ່ຽວຂ້ອງ ໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດບໍ່ໄປຕາມສັນຍາ, ບໍ່ເສຍພັນທະດ້ານພາສີ, ອາກອນ ແລະ ພັນທະດ້ານການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

6. ສະເໜີສ້າງ, ບໍາລຸງ, ຍົກລະດັບ ພະນັກງານ-ລັດຖະກອນ ກ່ຽວກັບວຽກງານການລົງທຶນ;

7. ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

8. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 102 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ກະສິກໍາ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ຂັ້ນກະຊວງ**

1. ຄົ້ນຄວ້າສ້າງ, ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ບຽບການກ່ຽວກັບການສົ່ງເສີມການລົງທຶນໃນຂະແໜງການຂອງຕົນ;

2. ປະສານສົມທົບກັບຂະແໜງການ ແຜນການ ແລະ ການລົງທຶນ, ອຸດສາຫະກໍາ ແລະ ການຄ້າ ແລະ ການເງິນ ໃນການສ້າງແຜນການດຶງດູດການລົງທຶນທີ່ພົວພັນກັບຂະແໜງການຕົນ;

3. ຊີ້ນໍາ ແລະ ອໍານວຍຄວາມສະດວກ ໃນການດໍາເນີນການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ມີປະສິດທິຜົນ;

4. ເປັນເຈົ້າການປະສານງານ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການສ້າງ ແລະ ປັບປຸງກົດໝາຍ, ລະບຽບການ, ແບບພິມ, ມາດຕະຖານ, ຂັ້ນຕອນ, ເຕັກນິກ ພ້ອມທັງປະກາດໃຊ້ແບບພິມ ແລະ ແນະນໍາການຈັດຕັ້ງປະຕິບັດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມເປັນເອກະພາບ. ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກໍາລຸ່ມກົດໝາຍ ແລະ ການປະຕິບັດສັນຍາການລົງທຶນ ໃນບັນດາກິດຈະການທີ່ໄດ້ຮັບອະນຸມັດຈາກຂະແໜງການຕົນ;

5. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການລົງທຶນ, ການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການລວມທັງການແກ້ໄຂຂໍ້ສະເໜີ, ຂໍ້ຂັດແຍ່ງ ແລະ ບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນຂອບເຂດທົ່ວປະເທດ;

6. ຄົ້ນຄວ້າ ແລະ ມີຄວາມເຫັນຕໍ່ການລົງທຶນ ທີ່ພົວພັນກັບຂະແໜງການຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

7. ກໍ່ສ້າງ, ບໍາລຸງ, ຍົກລະດັບພະນັກງານ ໃນຂະແໜງການຕົນ ກ່ຽວກັບວຽກງານການລົງທຶນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນ;

9. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງລົງທຶນ ຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມລາຍງານໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ຂັ້ນ ແຂວງ ແລະ ຂັ້ນເມືອງ**

1. ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ບຽບການ ກ່ຽວກັບການສົ່ງເສີມການລົງທຶນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປະສານສົມທົບກັບຂະແໜງການແຜນການ ແລະ ການລົງທຶນ, ອຸດສາຫະກໍາ ແລະ ການຄ້າ ແລະ ການເງິນ ຂັ້ນທ້ອງຖິ່ນ ໃນການສ້າງແຜນການດຶງດູດການລົງທຶນ ທີ່ພົວພັນກັບຂະແໜງການຕົນຮັບຜິດຊອບ;

3. ອໍານວຍຄວາມສະດວກ ໃນການດໍາເນີນການບໍລິການ ການລົງທຶນປະຕູດຽວ ຕາມຂອບເຂດສິດຂອງຕົນ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທໍາ, ມີປະສິດທິຜົນ ແລະ ສອດຄ່ອງກັບກົດໝາຍ;

4. ປະສານສົມທົບກັບບັນດາຂະແໜງການອື່ນຂັ້ນທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງການລົງທຶນ ແລະ ການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ລວມທັງການແກ້ໄຂສິ່ງກີດຂວາງ ແລະ ບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນທ້ອງຖິ່ນຂອງຕົນ;

5. ຄົ້ນຄວ້າ ແລະ ມີຄວາມເຫັນຕໍ່ການລົງທຶນ ທີ່ພົວພັນກັບຂະແໜງການຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

6. ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານ ໃນຂະແໜງການຕົນ ກ່ຽວກັບວຽກງານການລົງທຶນ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນຕາມການຕົກລົງຂອງຂັ້ນເທິງ;

8. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງລົງທຶນ ຕໍ່ຂະແໜງແຜນການ ແລະ ການລົງທຶນ ເພື່ອສັງລວມລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາວຽກງານການສົ່ງເສີມການລົງທຶນ

### ມາດຕາ 103 (ປັບປຸງ) ອົງການກວດກາ

ອົງການກວດກາວຽກງານສົ່ງເສີມການລົງທຶນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 98 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ຕາມພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຕິດຕາມ, ກວດກາການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 104 ເນື້ອໃນການກວດກາ

ທຸກການເຄື່ອນໄຫວຂອງບັນດາກິດຈະການການລົງທຶນ ລ້ວນແລ້ວແຕ່ໄດ້ຮັບການຄຸ້ມຄອງ, ຕິດຕາມກວດກາ ຈາກອົງການກວດກາວຽກງານສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 103 ຂອງກົດໝາຍສະບັບນີ້.

ເນື້ອໃນການກວດກາ ມີ ດັ່ງນີ້:

1. ກວດກາ ການປະຕິບັດສັນຍາການລົງທຶນ;

2. ກວດກາການປະຕິບັດຂັ້ນຕອນຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ;

3. ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ;

4. ກວດກາ ການປະຕິບັດມາດຕະການຄວາມປອດໄພຂອງແຮງງານ;

5. ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ອົງການກວດກາວຽກງານສົ່ງເສີມການລົງທຶນ ມີສິດສະເໜີມາດຕະການແກ້ໄຂຕໍ່ຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

**ມາດຕາ 105 (ປັບປຸງ) ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງ ຄັ້ງ ຕໍ່ປີ ໂດຍແມ່ນຫ້ອງການບໍລິການ ການລົງທຶນປະຕູດຽວ ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າຢ່າງນ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາ ດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 106 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການລົງທຶນທີ່ມີປະສິດທິຜົນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຶງດູດ ແລະ ການຊຸກຍູ້ການລົງທຶນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 107 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ, ລະບຽບການ, ສັນຍາ ແລະ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມກົດໝາຍ.

## ພາກທີ XIII

## ບົດບັນຍັດສຸດທ້າຍ

**ມາດຕາ 108 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 109 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ກົດໝາຍສະບັບນີ້ປ່ຽນແທນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ02/ສພຊ, ລົງວັນທີ 08 ກໍລະກົດ 2009.

ຜູ້ລົງທຶນ, ຜູ້ພັດທະນາ ແລະ ວິສາຫະກິດ ທີ່ໄດ້ຮັບຜົນປະໂຫຍດພາຍໃຕ້ກົດໝາຍສະບັບເກົ່າ ແລະ ສັນຍາທີ່ໄດ້ເຊັນກັບລັດຖະບານກ່ອນໜ້ານີ້ ແມ່ນບໍ່ມີການປ່ຽນແປງ ຈົນກວ່າຈະສິ້ນສຸດສັນຍາ.

ຜູ້ລົງທຶນ, ຜູ້ພັດທະນາ ແລະ ວິສາຫະກິດ ຫາກມີຈຸດປະສົງ ຕ້ອງການຮັບນະໂຍບາຍສົ່ງເສີມການລົງທຶນຕາມກົດໝາຍສະບັບນີ້ ກໍມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ພາຍໃນເວລາ ໜຶ່ງຮ້ອຍຊາວວັນ ຈາກນັ້ນ ຂະແໜງການດັ່ງກ່າວ ຕ້ອງແຈ້ງໃຫ້ຜູ້ສະເໜີປະຕິບັດ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ ເລກ 116/ປປທ

ນະຄອນຫຼວງວຽງຈັນ, ວັນທີ 22. 6. 2017

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 (ສະບັບປັບປຸງປີ 2015);
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 011/ສພຊ, ລົງວັນທີ 11 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 016/ຄປຈ, ລົງວັນທີ 09 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 011/ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 / 05 / 17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍຂອງ ວັນທີ 11 ພຶດສະພາ 2017.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 24 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍ ສະຖິຕິ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ, ການຄຸ້ມຄອງ, ການຕິດຕາມ ແລະ ການກວດກາ ວຽກງານສະຖິຕິ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການສ້າງ ແລະ ພັດທະນາຢ່າງເປັນລະບົບ, ທັນສະໄໝ, ໜັກແໜ້ນ ແລະ ມີປະສິດທິພາບ ແນໃສ່ຮັບປະກັນຂໍ້ມູນສະຖິຕິຄົບຖ້ວນ, ຊັດເຈນ, ທັນເວລາ ແລະ ສອດຄ່ອງກັບຄວາມເປັນຈິງ ສາມາດເປັນບ່ອນອີງໃຫ້ແກ່ການກຳນົດທິດທາງ, ໜ້າທີ່ ແລະ ຄາດໝາຍລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການສ້າງສາປະເທດຊາດໃຫ້ມັ່ງຄັ່ງ, ເຂັ້ມແຂງ, ຍຸຕິທຳ ແລະ ສີວິໄລ.

### ມາດຕາ 2 (ປັບປຸງ) ສະຖິຕິ

ສະຖິຕິ ແມ່ນ ຂໍ້ມູນ ແລະ ຕົວເລກ ທີ່ສ່ອງແສງເຖິງສະພາບຄວາມເປັນຈິງ ຂອງເຫດການທີ່ເກີດຂຶ້ນໃນສັງຄົມ, ສະພາບແວດລ້ອມຂອງການດຳເນີນງານ ແລະ ການດຳລົງຊີວິດ ໃນໄລຍະເວລາໃດໜຶ່ງ ຊຶ່ງໄດ້ມາຈາກ ການສຳຫຼວດ ແລະ ການລາຍງານບໍລິຫານ ໂດຍຜ່ານຂະບວນການສຳພາດ, ການເກັບກຳ, ການສັງລວມ, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະ ຕາມວິທະຍາສາດດ້ານສະຖິຕິ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

**1. ລະບົບສະຖິຕິແຫ່ງຊາດ** ໝາຍເຖິງ ການສັງລວມສະຖິຕິໃນລະດັບສູນກາງ ແລະ ທ້ອງຖິ່ນ ໂດຍມີຂໍ້ມູນສະຖິຕິທາງການ, ແຜນດຳເນີນງານ, ພື້ນຖານໂຄງລ່າງ ແລະ ອົງການຈັດຕັ້ງສະຖິຕິແຫ່ງຊາດ;

**2. ສະຖິຕິທາງການ** ໝາຍເຖິງ ສະຖິຕິ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ໂດຍຜ່ານຂະບວນການເກັບກຳ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະ ຕາມວິທະຍາສາດດ້ານສະຖິຕິ ໂດຍໄດ້ຮັບການຮັບຮອງຈາກລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

**3. ວິທະຍາສາດດ້ານສະຖິຕິ** ໝາຍເຖິງ ຄວາມອຸດົມສົມບູນ, ຄວາມກວ້າງຂວາງ ແລະ ຄວາມເປັນໜຶ່ງດຽວ ໃນດ້ານວິທີການ, ຂະບວນການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ບົນພື້ນຖານນິຍາມ, ແນວຄວາມຄິດ, ຄູ່ມືແນະນຳ, ມາດຕະຖານສາກົນ, ປຶ້ມຫຼັກສູດວິທະຍາສາດດ້ານສະຖິຕິ ທີ່ສາກົນວາງອອກ ໃນແຕ່ລະໄລຍະ;

**4. ການວິເຄາະ** ໝາຍເຖິງ ຂະບວນການໄຈ້ແຍກ, ການກວດກາ, ການກັ່ນຕອງ; ການສຶກສາອົງປະກອບຕ່າງໆ ເພື່ອໃຫ້ອະທິບາຍໄດ້ຄວາມເປັນຈິງ, ສາຍພົວພັນ, ຄຸນລັກສະນະຂອງຂໍ້ມູນ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຕົວເລກສະຖິຕິ ແລະ ສາມາດນຳໃຊ້ສຶກສາຄົ້ນຄ້ວາບັນຫາອື່ນໆໄດ້;

**5. ການວິໄຈ** ໝາຍເຖິງ ວິທີການໃດໜຶ່ງທີ່ໃຊ້ເພື່ອການຊອກຫາສາເຫດ ຫຼື ທີ່ມາຂອງບັນຫາຢ່າງມີຂັ້ນຕອນ, ເປັນລະບົບລະບຽບ ແລະ ມີເປົ້າໝາຍທີ່ຈະແຈ້ງ;

**6. ຄວາມເປັນເອກະລາດທາງດ້ານວິຊາການ** ໝາຍເຖິງ ຄວາມເປັນເອກະລາດທາງດ້ານການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິທາງການ ຕາມວິທະຍາສາດດ້ານສະຖິຕິ;

**7. ການສຳຫຼວດສະຖິຕິ** ໝາຍເຖິງ ວິທີການເກັບກຳຂໍ້ມູນ ຫຼື ຕົວເລກທີ່ຕ້ອງການ ໂດຍນຳໃຊ້ຄຳຖາມ ຫຼື ແບບສອບຖາມ ເພື່ອສຳພາດຜູ້ສະໜອງຂໍ້ມູນແບບທາງກົງ ແລະ ທາງອ້ອມ ຕາມວິທະຍາສາດດ້ານສະຖິຕິ ແລະ ໄລຍະເວລາ ທີ່ໄດ້ກຳນົດໄວ້ຢ່າງເປັນເອກະພາບກັນ ໃນແຕ່ລະການສຳຫຼວດ;

**8. ການລາຍງານບໍລິຫານ** ໝາຍເຖິງ ການເກັບກຳ, ການສັງລວມ ແລະ ການລາຍງານ ຂໍ້ມູນສະຖິຕິ ຢ່າງເປັນປົກກະຕິ ຂອງຫົວໜ່ວຍພື້ນຖານຕາມພາລະບົດບາດ ແລະ ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ຕ້ອງໄດ້ສະໜອງໃຫ້ແກ່ການຈັດຕັ້ງສະຖິຕິແຫ່ງຊາດ;

**9. ຕົວຊີ້ບອກ** ໝາຍເຖິງ ຕົວເລກສະຖິຕິ ເພື່ອນຳໃຊ້ໃນການວັດແທກ ຂະໜາດ, ການປະເມີນການປ່ຽນແປງໃນການພັດທະນາທີ່ພົວພັນກັບເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ຄວາມໝັ້ນຄົງ ແລະ ເຫດການໃດໜຶ່ງ ໃນໄລຍະເວລາ ແລະ ໃນສະຖານທີ່ໃດໜຶ່ງ;

**10. ຂໍ້ມູນດິບ** ໝາຍເຖິງ ຂໍ້ມູນ, ຖານຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ທີ່ຍັງບໍ່ທັນຜ່ານຂະບວນການຜະລິດ ແລະ ປຸງແຕ່ງ ຕາມວິທະຍາສາດດ້ານສະຖິຕິ;

**11. ຖານຂໍ້ມູນ** ໝາຍເຖິງ ຊຸດຂໍ້ມູນທີ່ໄດ້ສ້າງຂຶ້ນຢູ່ໃນລະບົບເອເລັກໂຕຣນິກ ຊຶ່ງສາມາດເຂົ້າເຖິງໄດ້ດ້ວຍຫຼາຍຮູບແບບ ແລະ ຫຼາຍວິທີ;

**12. ປີຖານ** ໝາຍເຖິງ ປີທີ່ເປັນຈຸດປຽບທຽບ ຫຼື ບ່ອນອີງ ສໍາລັບການວັດແທກລະດັບການປ່ຽນແປງໃດໜຶ່ງ ດ້ານເສດຖະກິດ-ສັງຄົມ;

**13. ຫົວໜ່ວຍພື້ນຖານ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ ແລະ ບໍ່ແມ່ນຂອງລັດ ທີ່ດໍາເນີນການເຄື່ອນໄຫວທຸລະກິດ, ການຜະລິດ, ການບໍລິການ ແລະ ການເຄື່ອນໄຫວວັດທະນະທໍາ-ສັງຄົມ ທີ່ຫວັງຜົນກໍາໄລ ແລະ ບໍ່ຫວັງຜົນກໍາໄລ;

**14. ສະຖິຕິການຂຶ້ນບັນຊີ** ໝາຍເຖິງ ການເກັບກໍາສະຖິຕິບັນຊີຫົວໜ່ວຍພື້ນຖານ ທີ່ມີການເຄື່ອນໄຫວທຸລະກິດ ລວມທັງຫົວໜ່ວຍພື້ນຖານທີ່ໄດ້ຂຶ້ນທະບຽນ ແລະ ບໍ່ໄດ້ຂຶ້ນທະບຽນ ຊຶ່ງມີການບັນທຶກຢ່າງເປັນປະຈໍາ ແລະ ຕໍ່ເນື່ອງ ໂດຍການຈັດຕັ້ງຂອງລັດ ຫຼື ການຈັດຕັ້ງໃດໜຶ່ງ;

**15. ສະຖິຕິການຂຶ້ນທະບຽນ** ໝາຍເຖິງ ການເກັບກໍາສະຖິຕິ, ການສັງລວມປະຈໍາປີ ຕາມການລາຍງານບໍລິຫານ ເພື່ອສ້າງເປັນບັນຊີ ແລະ ຖານຂໍ້ມູນ;

**16. ການຜະລິດສະຖິຕິ** ໝາຍເຖິງ ຂະບວນ ການເກັບກໍາ, ການສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ, ການວິເຄາະຂໍ້ມູນສະຖິຕິ ແລະ ການແປຄວາມໝາຍຂອງຂໍ້ມູນ ທີ່ໄດ້ຈາກການສໍາຫຼວດ ແລະ ການລາຍງານບໍລິຫານ ຕາມວິທະຍາສາດດ້ານສະຖິຕິ;

**17. ການປຸງແຕ່ງສະຖິຕິ** ໝາຍເຖິງ ຂັ້ນຕອນໜຶ່ງ ຂອງການຜະລິດສະຖິຕິ ກ່ຽວກັບການສຶກສາຄວາມສອດຄ່ອງ ຫຼື ຄວາມເປັນໄປໄດ້ຂອງຂໍ້ມູນ, ການໃສ່ລະຫັດສາລະບານ, ການຈັດລຽງລໍາດັບ, ການຈັດໝວດ, ການຈັດກຸ່ມ ຕາມວິທະຍາສາດດ້ານສະຖິຕິ;

**18. ຫົວໜ່ວຍການປົກຄອງ** ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ;

**19. ການຂຶ້ນບັນຊີຫົວໜ່ວຍການປົກຄອງ** ໝາຍເຖິງ ການຂຶ້ນບັນຊີຫົວໜ່ວຍການປົກຄອງ ຊຶ່ງມີການບັນທຶກຢ່າງເປັນປະຈໍາ ແລະ ຕໍ່ເນື່ອງ ໂດຍການຈັດຕັ້ງຂອງລັດ;

**20. ລະບົບລະຫັດສາລະບານ** ໝາຍເຖິງ ການຈັດແບ່ງຂໍ້ມູນສະຖິຕິອອກເປັນ ພາກ, ຂະແໜງ, ໝວດ, ໝູ່, ກຸ່ມ ໂດຍອີງໃສ່ມາດຕະຖານຂອງສາກົນ ຊຶ່ງນໍາໃຊ້ລະຫັດທີ່ເປັນຕົວເລກ ຫຼື ຕົວອັກສອນໃນການກໍານົດ ເພື່ອຄວາມເປັນເອກະພາບໃນການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

**21. ການສໍາຫຼວດແບບຕົວແທນລະດັບຊາດ** ໝາຍເຖິງ ການເກັບກໍາຂໍ້ມູນ ຈາກຕົວແທນຂອງຈໍານວນປະຊາກອນທັງໝົດຂອງຊາດ ກ່ຽວກັບຄຸນລັກສະນະ ຫຼື ເຫດການທີ່ເກີດຂຶ້ນຕາມຈຸດປະສົງຂອງການສໍາຫຼວດນັ້ນ;

**22. ການສໍາຫຼວດແບບຕົວແທນລະດັບຂະແໜງການ** ໝາຍເຖິງ ການເກັບກໍາຂໍ້ມູນ ຈາກຕົວແທນຂອງຈໍານວນປະຊາກອນທັງໝົດຂອງຂະແໜງການ ກ່ຽວກັບຄຸນລັກສະນະ ຫຼື ເຫດການທີ່ເກີດຂຶ້ນ ຕາມຈຸດປະສົງຂອງການສໍາຫຼວດນັ້ນ;

**23. ການສຳຫຼວດແບບຕົວແທນລະດັບທ້ອງຖິ່ນ** ໝາຍເຖິງ ການເກັບກຳຂໍ້ມູນ ຈາກຕົວແທນຂອງຈຳນວນປະຊາກອນທັງໝົດຂອງທ້ອງຖິ່ນ ກ່ຽວກັບຄຸນລັກສະນະ ຫຼື ເຫດການທີ່ເກີດຂຶ້ນຕາມຈຸດປະສົງຂອງການສຳຫຼວດນັ້ນ;

**24. ນັກເດີນສຳຫຼວດ** ໝາຍເຖິງ ພະນັກງານ-ລັດຖະກອນ ຫຼື ບຸກຄົນ ທີ່ບໍ່ແມ່ນລັດຖະກອນ ຊຶ່ງໄດ້ຮັບມອບໝາຍໃຫ້ເກັບກຳ ແລະ ສັງລວມຂໍ້ມູນໃນການດຳເນີນການສຳຫຼວດໃດໜຶ່ງ;

**25. ນັກກວດກາ** ໝາຍເຖິງ ພະນັກງານ-ລັດຖະກອນ ຫຼື ບຸກຄົນ ທີ່ບໍ່ແມ່ນລັດຖະກອນ ຊຶ່ງໄດ້ຮັບມອບໝາຍໃຫ້ກວດກາຂໍ້ມູນ, ຕົວເລກທີ່ນັກເດີນສຳຫຼວດເກັບກຳ ແລະ ສັງລວມໄດ້;

**26. ຜູ້ສະໜອງຂໍ້ມູນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີພູມລຳເນົາ ຢູ່ ສປປ ລາວ ຊຶ່ງໄດ້ສະໜອງຂໍ້ມູນສະຖິຕິ;

**27. ຄົວເຮືອນ** ໝາຍເຖິງ ເຮືອນທີ່ມີບຸກຄົນ ຫຼື ກຸ່ມຄົນ ຊຶ່ງມີການກິນຢູ່ຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຮ່ວມກັນເປັນປະຈຳ; ຄົວເຮືອນໜຶ່ງປະກອບມີ ໜຶ່ງ ຫຼື ຫຼາຍຄອບຄົວ ທີ່ມີ ໜຶ່ງ ຫຼື ຫຼາຍສຳມະໂນຄົວ;

**28. ການຂຶ້ນທະບຽນພົນລະເມືອງ** ໝາຍເຖິງ ລະບົບການບັນທຶກຂໍ້ມູນພົນລະເມືອງ ແລະ ຜູ້ຢູ່ອາໄສທັງໝົດ ລວມທັງການເກີດ, ການຕາຍ, ການແຕ່ງດອງ, ການຢ່າຮ້າງ, ການຮັບເອົາເດັກເປັນລູກລ້ຽງ ແລະ ອື່ນໆ;

**29. ສະຖິຕິບົດບາດຍິງ-ຊາຍ** ໝາຍເຖິງ ຂໍ້ມູນທີ່ສະແດງໃຫ້ເຫັນເຖິງຄວາມແຕກຕ່າງ ແລະ ຄວາມບໍ່ສະເໝີພາບລະຫວ່າງ ຍິງ ແລະ ຊາຍ ໃນທຸກໆດ້ານຂອງສະພາບການດຳລົງຊີວິດ ເຊັ່ນ ຄວາມແຕກຕ່າງກັນດ້ານ ການເຂົ້າເຖິງ, ການໃຫ້ໂອກາດ, ການສະໜອງ, ການໃຫ້ຄຸນຄ່າ ແລະ ການໃຫ້ຄວາມສຳຄັນຕ່າງໆ;

**30. ຂໍ້ມູນສະຖິຕິທີ່ບໍ່ມີຄວາມຈິງ** ໝາຍເຖິງ ຂໍ້ມູນທີ່ ປອມແປງ, ບິດເບືອນ ຈາກສະພາບຄວາມເປັນຈິງ ຫຼື ສ້າງຂໍ້ມູນຂຶ້ນມາໂດຍບໍ່ມີແຫຼ່ງຂໍ້ມູນອ້າງອີງທີ່ຖືກຕ້ອງ;

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສະຖິຕິ

ລັດ ຊຸກຍູ້, ສົ່ງເສີມ ການພັດທະນາວຽກງານສະຖິຕິດ້ວຍການກຳນົດ ນະໂຍບາຍ, ກົດໝາຍ, ລະບົບການຈັດຕັ້ງສະຖິຕິແຫ່ງຊາດ, ການສ້າງຊັບພະຍາກອນມະນຸດ, ການປະກອບບຸກຄະລາກອນ ແລະ ການສະໜອງງົບປະມານ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານສະຖິຕິ ໃນແຕ່ລະໄລຍະ ແນໃສ່ຮັບປະກັນຄວາມຍືນຍົງຂອງວຽກງານສະຖິຕິ;

ລັດ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນສະຕິປັນຍາ, ວັດຖຸປະກອນ, ແຫຼ່ງທຶນ ແລະ ສະໜອງຂໍ້ມູນ ເຂົ້າໃນການເຄື່ອນໄຫວວຽກງານສະຖິຕິ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ທຸກພາກສ່ວນໃນສັງຄົມໃນຂອບເຂດທົ່ວປະເທດ ສາມາດຮຽນຮູ້, ເຂົ້າໃຈວຽກງານສະຖິຕິ ແລະ ເຂົ້າເຖິງ ຂໍ້ມູນທີ່ຊັດເຈນ ແລະ ທັນສະພາບການ.

### ມາດຕາ 5 (ປັບປຸງ) ຫຼັກການພື້ນຖານກ່ຽວກັບວຽກງານສະຖິຕິ

ໃນການເຄື່ອນໄຫວວຽກງານສະຖິຕິ ຕ້ອງດຳເນີນບົນຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

2. ຮັບປະກັນຄວາມຖືກຕ້ອງ ຕາມວິທະຍາສາດດ້ານສະຖິຕິ, ຄວາມເປັນເອກະລາດທາງດ້ານວິຊາການໃນການຜະລິດ, ການເຜີຍແຜ່ ແລະ ການຕອບສະໜອງຂໍ້ມູນສະຖິຕິ ໃຫ້ຖືກຕ້ອງຕາມຄວາມເປັນຈິງ, ພາວະວິໄສ, ຊັດເຈນ, ຄົບຊຸດ ແລະ ທັນຕາມກຳນົດເວລາ;

3. ຮັບປະກັນຄວາມເປັນເອກະພາບ ຂອງບັນດາຕົວຊີ້ບອກ, ລະບອບວິທີການຄິດໄລ່, ລະບົບຕາຕະລາງເກັບກຳ, ຫົວໜ່ວຍວັດແທກ, ລະບົບລະຫັດສາລະບານ, ໄລຍະເວລາການລາຍງານ ໂດຍໃຫ້ເອົາໃຈໃສ່ ສະຖິຕິແຍກເພດ;

4. ຮັບປະກັນການເປີດເຜີຍ ກ່ຽວກັບ ວິທີການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ນຳໃຊ້ຂໍ້ມູນສະຖິຕິ;

5. ຮັບປະກັນສິດສະເໝີພາບ ໃນການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນສະຖິຕິ ທີ່ໄດ້ເຜີຍແຜ່ ແລະ ປະກາດໃຊ້, ສາຍພົວພັນລະຫວ່າງຜູ້ຜະລິດ ແລະ ຜູ້ນຳໃຊ້ຂໍ້ມູນສະຖິຕິ.

### ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ຄົວເຮືອນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດ ແລະ ເຄື່ອນໄຫວກິດຈະກຳທີ່ກ່ຽວຂ້ອງກັບການຜະລິດ, ການສະໜອງ ແລະ ການນຳໃຊ້ຂໍ້ມູນສະຖິຕິໃນ ສປປ ລາວ ຍົກເວັ້ນການເຜີຍແຜ່, ການສະໜອງຂໍ້ມູນ ສະຖິຕິ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ.

### ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມໃຫ້ມີການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ ແລະ ຂໍ້ມູນສະຖິຕິທາງການ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ, ເຕັກນິກ, ເຊື່ອມໂຍງການນຳໃຊ້ວິທີວິທະຍາດ້ານສະຖິຕິ, ຄົ້ນຄວ້າ, ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອພັດທະນາວຽກງານສະຖິຕິ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ, ເຄົາລົບ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ປະເພດສະຖິຕິ

## ມາດຕາ 8 ປະເພດສະຖິຕິ

ສະຖິຕິ ແບ່ງອອກເປັນ ສີ່ ປະເພດຕົ້ນຕໍ ດັ່ງນີ້:

1. ສະຖິຕິເສດຖະກິດ;
2. ສະຖິຕິສັງຄົມ;
3. ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ;
4. ສະຖິຕິຄວາມໝັ້ນຄົງ.

## ມາດຕາ 9 (ປັບປຸງ) ສະຖິຕິເສດຖະກິດ

ສະຖິຕິເສດຖະກິດ ແມ່ນ ຂໍ້ມູນສະຖິຕິ ກ່ຽວກັບ ສະພາບການເຄື່ອນໄຫວຂອງການພັດທະນາດ້ານເສດຖະກິດ ກ່ຽວກັບ ກະສິກຳ, ປ່າໄມ້ ແລະ ການປະມົງ, ອຸດສາຫະກຳ, ຫັດຖະກຳ ແລະ ການຄ້າ, ພະລັງງານ ແລະ ບໍ່ແຮ່, ການກໍ່ສ້າງ, ການຄົມມະນາຄົມຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ວິທະຍາສາດ ແລະ ເຕັກໂນໂລຊີ, ການລົງທຶນ, ການເງິນ, ເງິນຕາ ແລະ ການປະກັນໄພ, ທະນາຄານ, ການທ່ອງທ່ຽວ, ການບັນຊີແຫ່ງຊາດ ແລະ ສະຖິຕິອື່ນທີ່ກ່ຽວຂ້ອງກັບເສດຖະກິດ ຊຶ່ງສອດຄ່ອງກັບຕົວຊີ້ບອກຂອງເປົ້າໝາຍການພັດທະນາ.

## ມາດຕາ 10 (ປັບປຸງ) ສະຖິຕິສັງຄົມ

ສະຖິຕິສັງຄົມ ແມ່ນ ຂໍ້ມູນສະຖິຕິກ່ຽວກັບສະພາບການເຄື່ອນໄຫວຂອງການພັດທະນາດ້ານສັງຄົມ ກ່ຽວກັບພົນລະເມືອງ, ຊົນເຜົ່າ, ການສຶກສາ, ສາທາລະນະສຸກ, ແຮງງານ, ສະຫວັດດີການສັງຄົມ, ຜູ້ພິການ, ຜູ້ອາຍຸສູງ, ຖະແຫຼງຂ່າວ ແລະ ວັດທະນະທຳ, ຄວາມທຸກຍາກ, ບົດບາດ ຍິງ-ຊາຍ, ການປະກັນສັງຄົມ, ສະຖິຕິທີ່ຢູ່ອາໄສ, ກິລາ-ກາຍຍະກຳ, ອົງການຈັດຕັ້ງສັງຄົມ, ອຸບປະຕິເຫດ, ຄະດີ; ສະຖິຕິການຂຶ້ນບັນຊີຫົວໜ່ວຍການປົກຄອງ, ສະຖິຕິການຂຶ້ນບັນຊີຄົວເຮືອນ; ສະຖິຕິການຂຶ້ນທະບຽນພົນລະເມືອງ ກ່ຽວກັບ ການເກີດ, ການຕາຍ, ການແຕ່ງດອງ, ການຢ່າຮ້າງ, ການຮັບເອົາເດັກເປັນລູກລ້ຽງ ແລະ ສະຖິຕິອື່ນທີ່ກ່ຽວຂ້ອງກັບສັງຄົມ ຊຶ່ງສອດຄ່ອງກັບຕົວຊີ້ບອກຂອງເປົ້າໝາຍການພັດທະນາ.

## ມາດຕາ 11 (ປັບປຸງ) ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ

ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ແມ່ນ ຂໍ້ມູນສະຖິຕິ ກ່ຽວກັບສະພາບການເຄື່ອນໄຫວຂອງການພັດທະນາດ້ານສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ກ່ຽວກັບພູມີປະເທດ, ທໍລະນີສາດ, ທີ່ດິນ, ແຮ່ທາດ, ອຸຕຸນິຍົມ, ອຸທົກກະສາດ, ໄພພິບັດ, ມົນລະພິດ, ສິ່ງເສດເຫຼືອ, ສານເຄມີ ແລະ ການບຳບັດ, ການສ້າງຄວາມສົມດູນ ລະຫວ່າງສິ່ງແວດລ້ອມ, ຊັບພະຍາກອນທຳມະ

ຊາດ, ມະນຸດ ແລະ ການພັດທະນາ ແລະ ສະຖິຕິອື່ນທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ແລະ ຊັບພະຍາກອນທໍາມະຊາດ ຊຶ່ງສອດຄ່ອງກັບຕົວຊີ້ບອກຂອງເປົ້າໝາຍການພັດທະນາ.

### ມາດຕາ 12 (ປັບປຸງ) ສະຖິຕິຄວາມໝັ້ນຄົງ

ສະຖິຕິຄວາມໝັ້ນຄົງ ແມ່ນ ຂໍ້ມູນສະຖິຕິ ກ່ຽວກັບ ສະພາບການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຄວາມໝັ້ນຄົງທາງດ້ານເສດຖະກິດ ແລະ ຄວາມປອດໄພຂອງສັງຄົມ ເປັນຕົ້ນ ສະຖິຕິການຄໍ້າປະກັນສະບຽງອາຫານ, ສະຖິຕິການຄ້າມະນຸດ.

## ພາກທີ III
## ການສ້າງສະຖິຕິ

### ມາດຕາ 13 ຄວາມສໍາຄັນ ແລະ ຄວາມຈໍາເປັນຂອງການສ້າງສະຖິຕິ

ການສ້າງສະຖິຕິ ແມ່ນ ການກໍານົດ ແລະ ການຜະລິດສະຖິຕິທີ່ດໍາເນີນຕາມຫຼັກວິທະຍາສາດດ້ານສະຖິຕິ ເພື່ອຮັບປະກັນໃຫ້ມີຂໍ້ມູນສະຖິຕິທາງການ ທີ່ມີຄຸນນະພາບ, ຄວາມຖືກຕ້ອງ ແລະ ຄວາມຄົບຖ້ວນ ແນໃສ່ຕອບສະໜອງໃຫ້ແກ່ການສ້າງ ແລະ ເປັນເຄື່ອງມືໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 14 (ປັບປຸງ) ວິທີການໃນການສ້າງສະຖິຕິ

ວິທີການໃນການສ້າງສະຖິຕິ ທີ່ເປັນທາງການ ມີ ວິທີການ ດັ່ງນີ້:

1. ການສໍາຫຼວດ;
2. ການລາຍງານບໍລິຫານ;
3. ການສ້າງສະຖິຕິການຂຶ້ນບັນຊີ;
4. ການສ້າງສະຖິຕິການຂຶ້ນທະບຽນ.

## ໝວດທີ 1
## ການສໍາຫຼວດ

### ມາດຕາ 15 (ປັບປຸງ) ປະເພດການສໍາຫຼວດສະຖິຕິ

ການສໍາຫຼວດສະຖິຕິ ມີ ສາມ ປະເພດ ດັ່ງນີ້:

1. ການສໍາຫຼວດໃຫຍ່;
2. ການສໍາຫຼວດແບບຕົວແທນ;
3. ການສໍາຫຼວດສະເພາະ;

ການສຳຫຼວດໃຫຍ່ ແມ່ນ ການເກັບກຳ, ຈົດນັບ, ບັນທຶກຂໍ້ມູນ ທຸກຫົວໜ່ວຍເປົ້າໝາຍ ຕາມຈຸດປະສົງ ຂອງການສຳຫຼວດນັ້ນ.

ການສຳຫຼວດແບບຕົວແທນ ແມ່ນ ການເກັບກຳ, ຈົດນັບ, ບັນທຶກຂໍ້ມູນ ບາງຫົວໜ່ວຍເປົ້າໝາຍທີ່ຜ່ານການຄັດເລືອກຕົວແທນ ຕາມວິທະຍາສາດດ້ານສະຖິຕິຂອງການອອກແບບຕົວແທນ ຕາມຈຸດປະສົງຂອງການສຳຫຼວດນັ້ນ ຊຶ່ງສາມາດເປັນຕົວແທນລະດັບຊາດ ແລະ ບໍ່ແມ່ນລະດັບຊາດ ຄືແຂວງ, ເມືອງ ແລະ ບ້ານ.

ການສຳຫຼວດສະເພາະ ແມ່ນການເກັບກຳ, ຈົດນັບ, ບັນທຶກຂໍ້ມູນ ທີ່ລົງເລິກຕາມຈຸດປະສົງສະເພາະຂົງເຂດໃດໜຶ່ງ ທີ່ມີໃນແຜນ ຫຼື ບໍ່ມີໃນແຜນການສຳຫຼວດ ຊຶ່ງສາມາດຈັດຕັ້ງປະຕິບັດໄດ້ທຸກເວລາຕາມຄວາມຕ້ອງການເພີ່ມເຕີມ, ໃນເວລາອັນຮີບດ່ວນ, ຈຳເປັນ ແລະ ໃນກໍລະນີທີ່ມີເຫດພາວະສຸກເສີນເກີດຂຶ້ນ.

**ມາດຕາ 16 (ປັບປຸງ) ການວາງແຜນການສຳຫຼວດ**

ການວາງແຜນການສຳຫຼວດ ແມ່ນ ການກຳນົດແຜນດຳເນີນການສຳຫຼວດຕາມຂັ້ນຕອນ ລວມມີການກະກຽມ, ການປະຕິບັດພາກສະໜາມ ແລະ ການປະເມີນຜົນ ໂດຍມີການແຕ່ງຕັ້ງ ຄະນະຮັບຜິດຊອບຂັ້ນສູນກາງ ແລະ ທ້ອງຖິ່ນ. ການກຳນົດແຜນດຳເນີນງານການສຳຫຼວດ ມີຂັ້ນຕອນ ດັ່ງນີ້:

1. ການກະກຽມການສຳຫຼວດ ແມ່ນ ຂັ້ນຕອນຂອງການສ້າງແຜນ, ສ້າງໂຄງການດຳເນີນງານການສຳຫຼວດ ຊຶ່ງປະກອບດ້ວຍການກຳນົດຈຸດປະສົງ, ເປົ້າໝາຍ, ຂອບເຂດ, ເນື້ອໃນ, ການອອກແບບສຳຫຼວດ, ວິທີການ, ການນຳໃຊ້ລະຫັດສາລະບານ, ການອອກແບບສອບຖາມຂອງການສຳຫຼວດ ລວມທັງການກະກຽມເຄື່ອງມື, ວັດຖຸປະກອນ, ບຸກຄະລາກອນ, ງົບປະມານ ແລະ ການໂຄສະນາປຸກລະດົມຂົນຂວາຍໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງປະກອບສ່ວນເຂົ້າໃນການສຳຫຼວດ;

2. ການປະຕິບັດພາກສະໜາມ ແມ່ນ ຂັ້ນຕອນການດຳເນີນແຜນຂອງການສຳຫຼວດ ຊຶ່ງປະກອບດ້ວຍການຝຶກອົບຮົມໃຫ້ແກ່ນັກເດີນສຳຫຼວດ ແລະ ນັກກວດກາ, ການດຳເນີນການເກັບກຳ, ການບັນທຶກ ແລະ ການຈົດກ່າຍ ໂດຍນຳໃຊ້ວິທີການສຳພາດ ໂດຍກົງ ແລະ ທາງອ້ອມ, ການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຂໍ້ມູນ ທີ່ໄດ້ຮັບຈາກຜູ້ສະໜອງຂໍ້ມູນ ໃນຂອບເຂດພື້ນທີ່ຂອງການສຳຫຼວດ;

3. ການປະເມີນຜົນ ແມ່ນ ຂັ້ນຕອນສຶກສາຄົ້ນຄວ້າ ແລະ ນຳສະເໜີຜົນຂອງການສຳຫຼວດ ຊຶ່ງປະກອບດ້ວຍການສັງລວມ, ການປຸງແຕ່ງ, ການສ້າງຖານຂໍ້ມູນ, ຕາຕະລາງສະຖິຕິ, ບົດລາຍງານ ແລະ ການເຜີຍແຜ່ຜົນຂອງການສຳຫຼວດ.

**ມາດຕາ 17 (ປັບປຸງ) ໄລຍະເວລາການສຳຫຼວດ**

ໄລຍະເວລາການສຳຫຼວດ ແມ່ນດຳເນີນໃນໄລຍະເວລາ 10 ປີ, 5 ປີ, ປະຈຳປີ ແລະ ປະຈຳງວດ ຫຼື ຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ ຊຶ່ງໄດ້ກຳນົດ ດັ່ງນີ້:

1. ການສຳຫຼວດໃຫຍ່ ປະກອບດ້ວຍ:

- ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ, ການສຳຫຼວດສະຖິຕິກະສິກຳທົ່ວປະເທດ ດຳເນີນໃນທຸກໆ ສິບ ປີ; ສຳລັບການສຳຫຼວດເສດຖະກິດທົ່ວປະເທດ ດຳເນີນໃນທຸກໆ ຫ້າ ປີ;

- ການສຳຫຼວດເສດຖະກິດ-ສັງຄົມອື່ນ ສາມາດ ດຳເນີນໃນເວລາທີ່ມີຄວາມຈຳເປັນ.

2. ການສຳຫຼວດແບບຕົວແທນ

ການສຳຫຼວດແບບຕົວແທນລະດັບຊາດ ປະກອບດ້ວຍ ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ, ການສຳຫຼວດແຮງງານ, ການສຳຫຼວດດັດຊະນີໝາຍສັງຄົມ ໃຫ້ດຳເນີນໃນທຸກໆ ຫ້າ ປີ ຫຼື ປະຈຳປີ ຕາມແຕ່ລະກໍລະນີຂອງການສຳຫຼວດ; ການສຳຫຼວດຄົວເຮືອນ, ການສຳຫຼວດວິສາຫະກິດ ແລະ ຫ້າງຮ້ານ ໃຫ້ດຳເນີນໃນທຸກໆປີ;

ສຳລັບການສຳຫຼວດແບບຕົວແທນບໍ່ແມ່ນລະດັບຊາດ ນັ້ນໃຫ້ປະຕິບັດຕາມແຜນດຳເນີນງານທີ່ໄດ້ກຳນົດໄວ້ໃນແຜນຍຸດທະສາດ ແລະ ແຜນດຳເນີນງານຂອງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງໃນແຕ່ລະໄລຍະ.

3. ການສຳຫຼວດສະເພາະ ສາມາດດຳເນີນໃນແຕ່ລະປີ ຫຼື ຕາມໄລຍະເວລາ ທີ່ເຫັນວ່າມີ ຄວາມຕ້ອງການ.

**ມາດຕາ 18 (ປັບປຸງ) ການອະນຸມັດການສຳຫຼວດ**

ການອະນຸມັດການສຳຫຼວດແຕ່ລະປະເພດໃຫ້ປະຕິບັດ ດັ່ງນີ້:

1. ນາຍົກລັດຖະມົນຕີ ເປັນຜູ້ອະນຸມັດການສຳຫຼວດໃຫຍ່ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ ໂດຍຜ່ານກະຊວງແຜນການ ແລະ ການລົງທຶນ;

2. ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອະນຸມັດການສຳຫຼວດແບບຕົວແທນລະດັບຊາດ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ ໂດຍຜ່ານການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

3. ລັດຖະມົນຕີກະຊວງ ຫຼື ຫົວໜ້າອົງການລັດທຽບເທົ່າກະຊວງ ເປັນຜູ້ອະນຸມັດການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ລະດັບຂະແໜງການຂອງຕົນຕາມການສະເໜີຂອງສູນສະຖິຕິປະຈຳກະຊວງ ຫຼື ອົງການລັດທຽບເທົ່າກະຊວງ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິແຫ່ງຊາດ;

4. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ອະນຸມັດການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ໃນລະດັບທ້ອງຖິ່ນຂອງຕົນ ຕາມການສະເໜີຂອງຂະແໜງສະຖິຕິປະຈຳພະແນກການ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການຈາກສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ຫຼື ຕາມການສະເໜີຂອງສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິແຫ່ງຊາດ;

5. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ອະນຸມັດການສຳຫຼວດແບບຕົວແທນ

ແລະ ການສຳຫຼວດສະເພາະ ໃນລະດັບທ້ອງຖິ່ນຂອງຕົນ ຕາມການສະເໜີຂອງໜ່ວຍງານສະຖິຕິປະຈຳຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງເມືອງ, ເທດສະບານ, ນະຄອນ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ຫຼື ຕາມການສະເໜີຂອງສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິປະຈຳແຂວງ, ນະຄອນຫຼວງ.

ການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ຂອງຫົວໜ່ວຍພື້ນຖານ ເພື່ອຮັບໃຊ້ສະເພາະການຈັດຕັ້ງຂອງຕົນນັ້ນ ສາມາດດຳເນີນການສຳຫຼວດດ້ວຍຕົນເອງໄດ້ ໂດຍບໍ່ຕ້ອງຂໍອະນຸມັດຈາກການຈັດຕັ້ງສະຖິຕິແຫ່ງຊາດ ແຕ່ຕ້ອງໄດ້ຮັບຄຳເຫັນດີຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ບໍ່ຖືວ່າເປັນສະຖິຕິທາງການ.

ສຳລັບການສຳຫຼວດ ທີ່ບໍ່ມີໃນແຜນຍຸດທະສາດ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ແຕ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນນັ້ນ ບຸກຄົນທີ່ໄດ້ກ່າວໄວ້ໃນຂໍ້ 1, 2, 3, 4 ແລະ 5 ຂອງມາດຕານີ້ ເປັນຜູ້ອະນຸມັດການສຳຫຼວດ ຕາມແຕ່ລະປະເພດ.

### ມາດຕາ 19 (ປັບປຸງ) ພາກສ່ວນຈັດຕັ້ງປະຕິບັດການສຳຫຼວດ

ພາກສ່ວນຈັດຕັ້ງປະຕິບັດການສຳຫຼວດ ແຕ່ລະປະເພດ ມີ ດັ່ງນີ້:

1. ສູນສະຖິຕິແຫ່ງຊາດ ເປັນຜູ້ຈັດຕັ້ງປະຕິບັດການສຳຫຼວດໃຫຍ່, ການສຳຫຼວດແບບຕົວແທນລະດັບຊາດ ແລະ ການສຳຫຼວດສະເພາະ ທີ່ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;

2. ສູນສະຖິຕິປະຈຳ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ, ນະຄອນ ເປັນຜູ້ດຳເນີນການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ເພື່ອຈຸດປະສົງຮັບໃຊ້ຄວາມຕ້ອງການຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໂດຍໄດ້ຮັບການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການ ຈາກສູນສະຖິຕິແຫ່ງຊາດ;

3. ຫົວໜ່ວຍພື້ນຖານ ສາມາດດຳເນີນການສຳຫຼວດແບບຕົວແທນ ຫຼື ການສຳຫຼວດສະເພາະ ເພື່ອເປັນຂໍ້ມູນສະຖິຕິຮັບໃຊ້ການເຄື່ອນໄຫວວຽກງານຂອງຕົນ ແຕ່ບໍ່ຖືວ່າເປັນສະຖິຕິທາງການ ແລະ ຕ້ອງໄດ້ຮັບການເຫັນດີຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ບໍ່ອະນຸຍາດໃຫ້ດຳເນີນການສຳຫຼວດດ້ວຍຕົນເອງ ແຕ່ຖ້າມີຄວາມຈຳເປັນ ກໍສາມາດຈັດຕັ້ງປະຕິບັດໄດ້ ໂດຍຜ່ານການຈັດຕັ້ງສະຖິຕິຂອງຂະແໜງການທີ່ກ່ຽວຂ້ອງ ແລະ ສູນສະຖິຕິແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

### ມາດຕາ 20 (ປັບປຸງ) ພັນທະໃນການສະໜອງຂໍ້ມູນໃຫ້ແກ່ການສຳຫຼວດ

ຄົວເຮືອນ, ຫົວໜ່ວຍພື້ນຖານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທີ່ດຳເນີນກິດຈະກຳ ໃນ ສປປ ລາວ ມີ ພັນທະໃນການສະໜອງຂໍ້ມູນໃຫ້ແກ່ການສຳຫຼວດ ດັ່ງນີ້:

1. ຄົວເຮືອນ ທີ່ດຳລົງຊີວິດໃນ ສປປ ລາວ ຕ້ອງສະໜອງຂໍ້ມູນ ໃຫ້ນັກເດີນສຳຫຼວດ ໃນເວລາດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນຕາມແຜນງານຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

ການສະໜອງຂໍ້ມູນໃຫ້ແກ່ການເກັບກຳ ແລະ ການສຳຫຼວດທີ່ບໍ່ໄດ້ດຳເນີນໂດຍ ການຈັດຕັ້ງສະຖິຕິແຫ່ງຊາດ ແລະ ບໍ່ໄດ້ຮັບການຢັ້ງຢືນຈາກສູນສະຖິຕິແຫ່ງຊາດນັ້ນ ຜູ້ສະໜອງຂໍ້ມູນມີສິດຕອບບົນພື້ນຖານຄວາມສະໝັກໃຈ;

2. ຫົວໜ່ວຍພື້ນຖານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ດຳເນີນກິດຈະກຳ ໃນ ສປປ ລາວ ຕ້ອງລາຍງານຂໍ້ມູນກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ ຕາມຄວາມຕ້ອງການຂອງການສຳຫຼວດສະຖິຕິ ໃຫ້ຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນຕາມກຳນົດເວລາ ແລະ ຕາມລະບອບການລາຍງານສະຖິຕິ ຂອງການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ.

ເຈົ້າຂອງ ແລະ ຫົວໜ້າບັນຊີ ຂອງບັນດາຫົວໜ່ວຍພື້ນຖານ ມີພັນທະຮັບຜິດຊອບຕໍ່ຄວາມຖືກຕ້ອງ, ຊັດເຈນ ຂອງການລາຍງານຂໍ້ມູນ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ 2
## ການລາຍງານບໍລິຫານ

### ມາດຕາ 21 ປະເພດການລາຍງານບໍລິຫານ

ການລາຍງານບໍລິຫານ ມີ ສອງ ປະເພດ ດັ່ງນີ້:

1. ການລາຍງານສະຖິຕິ ຈາກຫົວໜ່ວຍພື້ນຖານການຈັດຕັ້ງຂອງລັດ;

2. ການລາຍງານສະຖິຕິ ຈາກຫົວໜ່ວຍພື້ນຖານການຈັດຕັ້ງທີ່ບໍ່ແມ່ນຂອງລັດ.

ການລາຍງານບໍລິຫານທັງສອງປະເພດ ດຳເນີນດ້ວຍການເກັບກຳ, ການສັງລວມ ແລະ ການລາຍງານຢ່າງເປັນປົກກະຕິ ຕາມພາລະບົດບາດຂອງຕົນ ໃຫ້ອົງການຄຸ້ມຄອງວຽກງານສະຖິຕິ ແລະ ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໂດຍນຳໃຊ້ລະບອບການລາຍງານທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

### ມາດຕາ 22 (ໃໝ່) ລະບົບການລາຍງານ

ລະບົບການລາຍງານ ມີ ສອງ ປະເພດ ຄື:

1. ການລາຍງານສະພາບການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານສະຖິຕິ ຂອງຫົວໜ່ວຍພື້ນຖານ;

2. ການລາຍງານຂໍ້ມູນສະຖິຕິ ຂອງຫົວໜ່ວຍພື້ນຖານ.

ການລາຍງານສະພາບການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານສະຖິຕິ ຂອງຫົວໜ່ວຍພື້ນຖານ ໃຫ້ລາຍງານຕໍ່ອົງການຄຸ້ມຄອງ, ອົງການກວດກາວຽກງານສະຖິຕິ ແລະ ການຈັດຕັ້ງຂັ້ນ

ເທິງຖັດຕົນ ໃນແຕ່ລະໄລຍະ ຕາມລະບຽບການ ແລະ ຄວາມຮຽກຮ້ອງຕ້ອງການຂອງຂັ້ນເທິງ.

ການລາຍງານຂໍ້ມູນສະຖິຕິ ຂອງຫົວໜ່ວຍພື້ນຖານ ໃຫ້ລາຍງານຕໍ່ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງຂອງຕົນ.

**ມາດຕາ 23 (ປັບປຸງ) ລະບອບການລາຍງານ**

ລະບອບການລາຍງານໃຫ້ອີງຕາມຈຸດປະສົງ, ເປົ້າໝາຍ, ຂອບເຂດຂອງການລາຍງານ ຊຶ່ງມີເນື້ອໃນ ດັ່ງນີ້:

1. ລະບົບຕາຕະລາງ;
2. ວິທີການຄິດໄລ່ຕາມວິທະຍາສາດດ້ານສະຖິຕິ;
3. ລະບົບລະຫັດສາລະບານ;
4. ໄລຍະເວລາການລາຍງານສະຖິຕິ;
5. ສຳນວນ ແລະ ສຳເນົາຂໍ້ມູນສະຖິຕິ.

ການລາຍງານຂໍ້ມູນສະຖິຕິ ຕ້ອງມີລາຍເຊັນ ແລະ ປະທັບຕາຢັ້ງຢືນຢ່າງເປັນທາງການ ຈາກການຈັດຕັ້ງທີ່ລາຍງານນັ້ນ.

**ມາດຕາ 24 (ໃໝ່) ລະບົບຕາຕະລາງ**

ລະບົບຕາຕະລາງ ປະກອບດ້ວຍ:

2. ຕາຕະລາງເກັບກຳຂໍ້ມູນ;
3. ຕາຕະລາງລາຍງານ.

ຕາຕະລາງເກັບກຳຂໍ້ມູນ ປະກອບດ້ວຍ ແບບສອບຖາມ ແລະ ຕາຕະລາງເກັບກຳຂໍ້ມູນ ຊຶ່ງມີດັ່ງນີ້:

- ແບບສອບຖາມ ແມ່ນຕາຕະລາງເກັບກຳຂໍ້ມູນ ທີ່ມີເນື້ອໃນເປັນຊຸດຂອງຄຳຖາມ ຫຼື ທາງເລືອກໃນການຕອບໄປຕາມແຕ່ລະຫົວຂໍ້ຂອງການສຳຫຼວດ;

- ຕາຕະລາງເກັບກຳຂໍ້ມູນ ປະກອບດ້ວຍ ຫົວຂໍ້ ຫຼື ຊື່ຂອງຕາຕະລາງ, ເລກລຳດັບ, ເນື້ອໃນ ກ່ຽວກັບລາຍການຂໍ້ມູນ ແລະ ຄຳຖາມຕ່າງໆ; ເວລາອ້າງອີງ, ເວລາລາຍງານ, ຫົວໜ່ວຍວັດແທກ ແລະ ແຫຼ່ງຂໍ້ມູນ.

ຕາຕະລາງລາຍງານ ສັງລວມຈາກຕາຕະລາງເກັບກຳຂໍ້ມູນ ຊຶ່ງມີຫົວຂໍ້ ຫຼື ຊື່ຂອງຕາຕະລາງ, ເລກລຳດັບ, ເນື້ອໃນ ກ່ຽວກັບລາຍການຂໍ້ມູນ, ຕົວຊີ້ບອກ; ລະຫັດສາລະບານ, ເວລາອ້າງອີງ, ເວລາລາຍງານ, ຫົວໜ່ວຍວັດແທກ ກ່ຽວກັບປະລິມານ, ມູນຄ່າ, ຂະໜາດ, ບໍລິມາດ ແລະ ອັດຕາສ່ວນຮ້ອຍ ຕາມແຕ່ລະປະເພດຂໍ້ມູນສະຖິຕິ; ແຫຼ່ງຂໍ້ມູນ ກ່ຽວກັບຊື່ການຈັດຕັ້ງທີ່ຜະລິດ ແລະ ສະໜອງຂໍ້ມູນສະຖິຕິ ແລະ ເວລາຜະລິດຂໍ້ມູນ ແລະ ສຳນວນຂໍ້ມູນສະຖິຕິ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການໃນການສ້າງຕາຕະລາງເກັບກຳຂໍ້ມູນ ແລະ ຕາຕະລາງລາຍງານຂໍ້ມູນສະຖິຕິທາງການໃນລະດັບຊາດ ໂດຍປະສານສົມທົບກັບການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ

ສາຍຂວາງ. ສໍາລັບການຈັດຕັ້ງສະຖິຕິລະບົບສາຍຂວາງນັ້ນ ໃຫ້ເປັນເຈົ້າການໃນການສ້າງຕາຕະລາງເກັບກໍາຂໍ້ມູນ ແລະ ຕາຕະລາງລາຍງານຂໍ້ມູນສະຖິຕິທາງການ ຕາມຄວາມຕ້ອງການຂອງຕົນ.

**ມາດຕາ 25 (ໃໝ່) ວິທີການຄິດໄລ່ຕາມວິທະຍາສາດດ້ານສະຖິຕິ**

ວິທີການຄິດໄລ່ຕາມວິທະຍາສາດດ້ານສະຖິຕິ ແມ່ນ ການນໍາໃຊ້ສູດການຄິດໄລ່ຄ່າສະຖິຕິຕ່າງໆ ຕາມຄຸນລັກສະນະຂອງປະເພດສະຖິຕິ ບົນພື້ນຖານຫຼັກການຂອງສາກົນ ແລະ ລະບົບສະຖິຕິແຫ່ງຊາດ.

ລະບອບການລາຍງານສະຖິຕິທາງການ ຕ້ອງຊີ້ແຈງວິທີການຄິດໄລ່ ຕາມວິທະຍາສາດດ້ານສະຖິຕິ ໃຫ້ຊັດເຈນ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ຄວາມໜ້າເຊື່ອຖືຂອງຂໍ້ມູນ.

**ມາດຕາ 26 (ໃໝ່) ລະບົບລະຫັດສາລະບານ**

ສູນສະຖິຕິແຫ່ງຊາດ ແລະ ການຈັດຕັ້ງສະຖິຕິລະບົບສາຍຂວາງ ເປັນຜູ້ຄຸ້ມຄອງ, ຄົ້ນຄວ້າ, ສ້າງ ແລະ ພັດທະນາ, ດັດປັບລະຫັດສາລະບານທີ່ສາກົນວາງອອກໃຫ້ແທດເໝາະກັບສະພາບຂອງ ສປປ ລາວ. ເພື່ອຮັບປະກັນຄວາມເປັນເອກະພາບ, ການສົມທຽບ ແລະ ເຊື່ອມໂຍງກັບສາກົນ ໃນການເກັບກໍາ, ສັງລວມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການນັ້ນ ໃຫ້ປະຕິບັດ ແລະ ນໍາໃຊ້ລະບົບລະຫັດສາລະບານ ດັ່ງນີ້:

1. ລະຫັດການປົກຄອງ: ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ;
2. ການຈັດແບ່ງຂະແໜງເສດຖະກິດ ມາດຕະຖານສາກົນ;
3. ການຈັດແບ່ງໝວດ ແລະ ລະຫັດ ຂອງສິນຄ້າຕາມລະບົບເອກະພາບ;
4. ການຈັດແບ່ງໝວດສໍາລັບການຄ້າລະຫວ່າງປະເທດລະບົບມາດຕະຖານ;
5. ການຈັດແບ່ງຜະລິດຕະພັນ;
6. ການຈັດແບ່ງການໃຊ້ຈ່າຍຂອງລັດຖະບານ;
7. ການຈັດແບ່ງສະຖິຕິການເງິນແຫ່ງລັດ;
8. ການຈັດແບ່ງການໃຊ້ຈ່າຍຂອງສະຖາບັນ ບໍ່ສະແຫວງຫາຜົນກໍາໄລ ກ່ຽວກັບການບໍລິການພາກຄົວເຮືອນ;
9. ການຈັດແບ່ງການໃຊ້ຈ່າຍ ຕາມຈຸດປະສົງຂອງສ່ວນບຸກຄົນໃນຄົວເຮືອນ;
10. ສະຖິຕິການຈັດແບ່ງຜະລິດຕະພັນ ຕາມຂະແໜງເສດຖະກິດ;
11. ການຈັດປະເພດອີງຕາມຄ່າໃຊ້ຈ່າຍຂອງຜູ້ຜະລິດໂດຍອີງຕາມຈຸດປະສົງ;
12. ການຈັດແບ່ງອາຊີບມາດຕະຖານສາກົນ;
13. ການຈັດແບ່ງໝວດຂະແໜງເສດຖະກິດແບບທົ່ວໄປ;
14. ການຈັດແບ່ງສະຖານະພາບໃນການສ້າງວຽກເຮັດງານທໍາ;

15. ການຈັດແບ່ງເຊື້ອພະຍາດສາກົນ;

16. ລະຫັດສາລະບານອື່ນ ທີ່ສູນສະຖິຕິແຫ່ງຊາດສ້າງຂຶ້ນ ໃນແຕ່ລະໄລຍະເມື່ອມີຄວາມຈຳເປັນ.

**ມາດຕາ 27 (ໃໝ່) ໄລຍະເວລາການລາຍງານສະຖິຕິ**

ການກຳນົດເວລາຂອງການລາຍງານສະຖິຕິ ໃຫ້ຖືເອົາປີປະຕິທິນເປັນຫຼັກ ໂດຍມີການລາຍງານປະຈຳອາທິດ, ເດືອນ, ງວດ ແລະ ປີ. ສຳລັບສະຖິຕິການສຶກສາ ໃຫ້ປະຕິບັດໄປຕາມການລາຍງານຂອງສົກການສຶກສາ.

ການລາຍງານສະຖິຕິ ໃຫ້ປະຕິບັດຕາມລະບອບການລາຍງານທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງກົດໝາຍສະບັບນີ້ ໂດຍໃຫ້ບັນດາການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ເປັນຜູ້ຄົ້ນຄວ້າ ແລະ ກຳນົດໄລຍະເວລາການລາຍງານເພີ່ມເຕີມ ເພື່ອໃຫ້ສາມາດລາຍງານທັນກັບເວລາ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 28 (ໃໝ່) ສຳນວນ ແລະ ສຳເນົາຂໍ້ມູນສະຖິຕິ**

ຂໍ້ມູນສະຖິຕິທີ່ສ້າງຂຶ້ນດ້ວຍວິທີການສຳຫຼວດ ແລະ ການລາຍງານບໍລິຫານນັ້ນ ຕ້ອງມີສຳນວນຕາມພັນທະໃນການລາຍງານສະຖິຕິ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

ສຳນວນຂໍ້ມູນສະຖິຕິ ແມ່ນ ເອກະສານທີ່ມີການບັນທຶກສຳເນົາໄວ້ນຳການຈັດຕັ້ງຂອງຕົນ ທີ່ພັນລະນາ ແລະ ອະທິບາຍລະອຽດຂອງຂໍ້ມູນ. ສຳນວນຂໍ້ມູນສະຖິຕິທີ່ເປັນຕົວຊີ້ບອກປະກອບດ້ວຍ ຊື່ຕົວຊີ້ບອກ, ນິຍາມ, ວິທີການຄິດໄລ່, ຂະບວນການເກັບກຳ ແລະ ປຸງແຕ່ງຂໍ້ມູນ, ຂອບເຂດ, ໄລຍະເວລາ, ຫົວໜ່ວຍວັດແທກ, ແຫຼ່ງຂໍ້ມູນ ແລະ ບ່ອນຕິດຕໍ່ພົວພັນ ແລະ ອື່ນໆ;

ສຳນວນຂໍ້ມູນສະຖິຕິ ຂອງການສຳຫຼວດປະກອບດ້ວຍ ການເກັບກຳຂໍ້ມູນທຸກຂັ້ນຕອນ ຂອງການຜະລິດຂໍ້ມູນສະຖິຕິ ແລະ ສຳນວນກ່ຽວກັບຕົວຊີ້ບອກໂດຍມີລະບອບການສັງລວມຂໍ້ມູນ ໃນແຕ່ລະຂັ້ນຕອນຂອງການສ້າງສະຖິຕິ, ການປຸງແຕ່ງຂໍ້ມູນສະຖິຕິ ແລະ ຕົວຊີ້ບອກ ທີ່ການຈັດຕັ້ງສະຖິຕິແຫ່ງຊາດ ແລະ ສາກົນວາງອອກ.

ສຳເນົາຂໍ້ມູນສະຖິຕິ ແມ່ນ ການເກັບຮັກສາຂໍ້ມູນ ແລະ ເອກະສານທີ່ມີການບັນທຶກສຳເນົາໄວ້ນຳການຈັດຕັ້ງຂອງຕົນ ແລະ ການສຳເນົາຂໍ້ມູນສະຖິຕິທາງການ ຕ້ອງເກັບຮັກສາໄວ້ໃນລະບົບການສຳເນົາເອກະສານ ດັ່ງນີ້:

1. ຖານຂໍ້ມູນການເກັບກຳການສຳຫຼວດ ແບບເອເລັກໂຕຣນິກ ແລະ ສຳເນົາຖານຂໍ້ມູນສະຖິຕິທາງການ ໃຫ້ເກັບຮັກສາໄວ້ໂດຍບໍ່ມີກຳນົດເວລາ ໃນລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງຕົນ ແລະ ຝາກໄວ້ນຳອົງການທີ່ຮັບຜິດຊອບຮັກສາຖານຂໍ້ມູນລະດັບຊາດ ຫຼື ທະນາຄານແຫ່ງ ສປປ ລາວ;

2. ໃບສອບຖາມການສຳຫຼວດໃຫຍ່ ແລະ ການສຳຫຼວດແບບຕົວແທນລະດັບຊາດ ຕ້ອງເກັບຮັກສາໄວ້ ບໍ່ໃຫ້ຫຼຸດ ສາມ ປີ;

3. ໃບສອບຖາມການສຳຫຼວດແບບຕົວແທນບໍ່ແມ່ນລະດັບຊາດ ແລະ ການສຳຫຼວດສະເພາະ ຕ້ອງເກັບຮັກສາໄວ້ ບໍ່ໃຫ້ຫຼຸດ ສອງ ປີ.

**ມາດຕາ 29 (ປັບປຸງ) ພັນທະໃນການລາຍງານສະຖິຕິ**

ຫົວໜ່ວຍພື້ນຖານ ແລະ ການຈັດຕັ້ງສະຖິຕິແຫ່ງຊາດ ມີພັນທະໃນການລາຍງານສະຖິຕິ ມີດັ່ງນີ້:

1. ລາຍງານໄປຕາມລະບົບການລາຍງານ, ລະບອບການລາຍງານ, ລະບົບຕາຕະລາງ, ວິທີການຄິດໄລ່ຕາມວິທະຍາສາດດ້ານສະຖິຕິ, ລະບົບລະຫັດສາລະບານ, ໄລຍະເວລາການລາຍງານສະຖິຕິ, ສຳນວນ ແລະ ສຳເນົາຂໍ້ມູນສະຖິຕິ;

2. ສ້າງສຳນວນ, ສຳເນົາ ແລະ ລາຍງານຂໍ້ມູນສະຖິຕິ ຕາມລະບອບການລາຍງານ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ;

3. ສະໜອງຂໍ້ມູນສະຖິຕິ ແລະ ຂໍ້ມູນດິບ ຕາມການສະເໜີ ຂອງການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ.

ການຈັດຕັ້ງສະຖິຕິ ລະບົບສາຍຕັ້ງ ແລະ ສາຍຂວາງ ທຸກຂັ້ນ ຕ້ອງຮັບຜິດຊອບຕໍ່ຄວາມຖືກຕ້ອງ, ຊັດເຈນຂອງການລາຍງານຂໍ້ມູນສະຖິຕິ ໃຫ້ການຈັດຕັ້ງສະຖິຕິຂັ້ນເທິງຖັດຕົນ ແລະ ສູນສະຖິຕິແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການ.

ທຸກພາກສ່ວນໃນສັງຄົມ ຕ້ອງອຳນວຍຄວາມສະດວກ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດວຽກງານ ຂອງການຈັດຕັ້ງສະຖິຕິແຫ່ງຊາດ.

**ມາດຕາ 30 (ປັບປຸງ) ປະເພດຄວາມລັບດ້ານສະຖິຕິ**

ຄວາມລັບດ້ານສະຖິຕິ ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

1. ຄວາມລັບຂອງລັດ ກ່ຽວກັບຄວາມໝັ້ນຄົງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມລັບທາງລັດຖະການ ຊຶ່ງໄດ້ກຳນົດໄວ້ສະເພາະ ຂອງບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ;

2. ຄວາມລັບສະເພາະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ.

## ໝວດທີ 3
## ການສ້າງສະຖິຕິການຂຶ້ນບັນຊີ

**ມາດຕາ 31 (ໃໝ່) ການສ້າງສະຖິຕິການຂຶ້ນບັນຊີ**

ການສ້າງສະຖິຕິການຂຶ້ນບັນຊີ ມີ ສີ່ ປະເພດ ດັ່ງນີ້:

1. ການສ້າງສະຖິຕິການຂຶ້ນບັນຊີຫົວໜ່ວຍພື້ນຖານເສດຖະກິດ;

2. ການສ້າງສະຖິຕິການຂຶ້ນບັນຊີຫົວໜ່ວຍການປົກຄອງ;

3. ການສ້າງສະຖິຕິການຂຶ້ນບັນຊີຄົວເຮືອນ;

4. ການສ້າງສະຖິຕິການຈົດນັບພົນລະເມືອງ.

**ມາດຕາ 32 (ໃໝ່) ການສ້າງສະຖິຕິການຂຶ້ນບັນຊີຫົວໜ່ວຍພື້ນຖານເສດຖະກິດ**

ການຂຶ້ນບັນຊີຫົວໜ່ວຍພື້ນຖານເສດຖະກິດ ແມ່ນ ການເກັບກໍາ ສັງລວມຂໍ້ມູນພື້ນຖານ ກ່ຽວກັບຫົວໜ່ວຍພື້ນຖານທີ່ເປັນບຸກຄົນ ແລະ ນິຕິບຸກຄົນ ທີ່ດໍາເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການ.

ການສ້າງສະຖິຕິການຂຶ້ນບັນຊີຫົວໜ່ວຍພື້ນຖານເສດຖະກິດ ດໍາເນີນຜ່ານການລາຍງານບໍລິຫານ ແລະ ການສໍາຫຼວດໃນແຕ່ລະໄລຍະ ໂດຍການຈັດຕັ້ງສະຖິຕິແຫ່ງຊາດ.

**ມາດຕາ 33 (ໃໝ່) ການສ້າງສະຖິຕິການຂຶ້ນບັນຊີ ຫົວໜ່ວຍການປົກຄອງ**

ການສ້າງສະຖິຕິການຂຶ້ນບັນຊີ ຫົວໜ່ວຍການປົກຄອງ ມີ ສອງ ປະເພດ ດັ່ງນີ້:

1. ການຈັດຕັ້ງລັດຖະບານ ມີ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກະຊວງ, ອົງການລັດທຽບເທົ່າກະຊວງ;

2. ການປົກຄອງທ້ອງຖິ່ນ ມີ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ.

ການສ້າງສະຖິຕິການຂຶ້ນບັນຊີ ຫົວໜ່ວຍການປົກຄອງ ແມ່ນ ການເກັບກໍາ ສັງລວມຊື່ ຈາກການລາຍງານບໍລິຫານ ແລະ ກໍານົດເປັນລະຫັດສາລະບານທີ່ເອກະພາບ ເພື່ອການຜະລິດຂໍ້ມູນສະຖິຕິທາງການ ໂດຍສູນສະຖິຕິແຫ່ງຊາດ.

**ມາດຕາ 34 (ໃໝ່) ການສ້າງສະຖິຕິການຂຶ້ນບັນຊີຄົວເຮືອນ**

ການຂຶ້ນບັນຊີຄົວເຮືອນ ແມ່ນ ການເກັບກໍາ ສັງລວມຈໍານວນຄົວເຮືອນທັງໝົດ ທີ່ຢູ່ໃນການຄຸ້ມຄອງຂອງບ້ານ.

ການສ້າງສະຖິຕິການຂຶ້ນບັນຊີຄົວເຮືອນ ດໍາເນີນຜ່ານການລາຍງານຈາກສະຖິຕິຂັ້ນບ້ານ ໃນແຕ່ລະປີ, ການສໍາຫຼວດແບບຕົວແທນໃນແຕ່ລະໄລຍະ, ການຈົດນັບພົນລະເມືອງ, ການສໍາຫຼວດພົນລະເມືອງທຸກໆ ສິບ ປີ ແລະ ການກໍານົດເປັນລະຫັດສາລະບານທີ່ເອກະພາບ ເພື່ອການຜະລິດຂໍ້ມູສະຖິຕິທາງການ ໂດຍການຈັດຕັ້ງສະຖິຕິລະບົບສາຍຕັ້ງ.

**ມາດຕາ 35 (ໃໝ່) ການສ້າງສະຖິຕິການຈົດນັບພົນລະເມືອງ**

ການຈົດນັບພົນລະເມືອງ ແມ່ນ ການເກັບກໍາເພື່ອຄາດຄະເນຈໍານວນປະຊາກອນ ໃຫ້ຊັດເຈນຖືກຕ້ອງໃນໄລຍະການສໍາຫຼວດໃຫຍ່ກ່ຽວກັບພົນລະເມືອງ.

ການສ້າງສະຖິຕິການຈົດນັບພົນລະເມືອງ ດໍາເນີນຜ່ານການເກັບກໍາຈໍານວນພົນລະເມືອງ ຕາມລະບົບການລາຍງານບໍລິຫານ ໃນແຕ່ລະປີ ແລະ ການຈົດນັບພົນລະເມືອງ ລະຫວ່າງ ການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນທຸກໆ ສິບ ປີ ເພື່ອຄາດຄະເນຈໍານວນພົນລະເມືອງໃຫ້ຊັດເຈນ ຫຼື ໃກ້ຄວາມເປັນຈິງ.

# ໝວດທີ 4
# ການສ້າງສະຖິຕິການຂຶ້ນທະບຽນ

**ມາດຕາ 36 (ໃໝ່) ການສ້າງສະຖິຕິການຂຶ້ນທະບຽນ**

ການສ້າງສະຖິຕິການຂຶ້ນທະບຽນ ມີ ສາມ ປະເພດ ດັ່ງນີ້:

1. ການສ້າງສະຖິຕິການຂຶ້ນທະບຽນຫົວໜ່ວຍພື້ນຖານເສດຖະກິດ;
2. ການສ້າງສະຖິຕິການຂຶ້ນທະບຽນພົນລະເມືອງ;
3. ການສ້າງສະຖິຕິການອອກບັດປະຈຳຕົວ.

**ມາດຕາ 37 (ໃໝ່) ການສ້າງສະຖິຕິການຂຶ້ນທະບຽນຫົວໜ່ວຍພື້ນຖານເສດຖະກິດ**

ການສ້າງສະຖິຕິການຂຶ້ນທະບຽນຫົວໜ່ວຍພື້ນຖານເສດຖະກິດ ແມ່ນ ການເກັບກຳ, ສັງລວມປະຈຳປີ ຕາມການລາຍງານບໍລິຫານ ຈາກບັນດາອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງກັບການອະນຸຍາດ ແລະ ການຂຶ້ນທະບຽນຫົວໜ່ວຍພື້ນຖານເສດຖະກິດ ເພື່ອສ້າງເປັນບັນຊີ ແລະ ຖານຂໍ້ມູນ ຕອບສະໜອງໃຫ້ແກ່ການປັບປຸງບັນຊີການຄັດເລືອກຕົວແທນ ຂອງການສຳຫຼວດລະດັບຊາດ.

**ມາດຕາ 38 (ໃໝ່) ການສ້າງສະຖິຕິການຂຶ້ນທະບຽນພົນລະເມືອງ**

ສະຖິຕິການຂຶ້ນທະບຽນພົນລະເມືອງ ແມ່ນ ສະຖິຕິການຈົດທະບຽນຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ. ປະເພດສະຖິຕິການຈົດທະບຽນຄອບຄົວ ປະກອບດ້ວຍສະຖິຕິການຈົດທະບຽນສຳມະໂນຄົວ, ທີ່ຢູ່ອາໄສ, ການເກີດ, ການຕາຍ, ການຫາຍສາບສູນ, ການແຕ່ງດອງ, ການຢ່າຮ້າງ, ການເອົາເດັກເປັນລູກລ້ຽງ, ການຮັບຮູ້ຄວາມເປັນພໍ່, ການປ່ຽນຊື່ ແລະ ນາມສະກຸນ, ການໂຍກຍ້າຍ; ການຈົດທະບຽນການເກັບ, ຝັງ, ເຜົາ ຫຼື ຍ້າຍຊາກສົບ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນພົນລະເມືອງ.

ການສ້າງສະຖິຕິການຂຶ້ນທະບຽນພົນລະເມືອງ ໃຫ້ປະຕິບັດຕາມຂະບວນການຜະລິດສະຖິຕິປະຈຳປີ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໂດຍການຈັດຕັ້ງສະຖິຕິແຫ່ງຊາດ ຕາມການລາຍງານຂອງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 39 (ໃໝ່) ການສ້າງສະຖິຕິການອອກບັດປະຈຳຕົວ**

ການສ້າງສະຖິຕິການອອກບັດປະຈຳຕົວ ໃຫ້ປະຕິບັດຕາມຂະບວນການຜະລິດສະຖິຕິປະຈຳປີຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໂດຍການຈັດຕັ້ງສະຖິຕິແຫ່ງຊາດ ຕາມການລາຍງານຂອງການຈັດຕັ້ງທີ່ກ່ຽວຂ້ອງ.

## ພາກທີ IV
## ການເຜີຍແຜ່ ແລະ ການນໍາໃຊ້ຂໍ້ມູນສະຖິຕິ

### ມາດຕາ 40 (ປັບປຸງ) ຄວາມຮັບຜິດຊອບໃນການຈັດພິມບົດລາຍງານສະຖິຕິ

ບົດລາຍງານສະຖິຕິ ແມ່ນ ການສະເໜີຜົນໄດ້ຮັບຈາກຂະບວນການຜະລິດຂໍ້ມູນສະຖິຕິ ໃນຮູບແບບປຶ້ມບົດລາຍງານ, ແຜ່ນພັບ, ແຜ່ນໂຄສະນາ, ແຜນທີ່, ແຜ່ນຊີດີ, ວີດີໂອສາລະຄະດີ.

ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ສາມາດດໍາເນີນການຈັດພິມສິ່ງພິມຕ່າງໆ ກ່ຽວກັບການລາຍງານສະຖິຕິ ທີ່ສ້າງຂຶ້ນຈາກຂໍ້ມູນທີ່ໄດ້ມາຈາກການລາຍງານບໍລິຫານ ແລະ ການສໍາຫຼວດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ທັງເປັນຜູ້ຮັບຜິດຊອບຕໍ່ຄວາມຖືກຕ້ອງຂອງເນື້ອໃນບົດລາຍງານສະຖິຕິ ຕາມວິທະຍາສາດດ້ານສະຖິຕິ. ສ່ວນຂັ້ນຕອນການອະນຸມັດຈັດພິມໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການພິມຈໍາໜ່າຍ.

### ມາດຕາ 41 (ປັບປຸງ) ການປະກາດໃຊ້ ແລະ ການເຜີຍແຜ່ຂໍ້ມູນສະຖິຕິທາງການ

ການປະກາດໃຊ້ ແລະ ການເຜີຍແຜ່ຂໍ້ມູນສະຖິຕິທາງການ ໃຫ້ປະຕິບັດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສູນສະຖິຕິແຫ່ງຊາດ ເປັນຜູ້ປະກາດໃຊ້ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການລະດັບຊາດ ແລະ ຜົນຂອງການສໍາຫຼວດຕ່າງໆ;

2. ສູນສະຖິຕິປະຈໍາ ກະຊວງ, ອົງການລັດທຽບເທົ່າກະຊວງ ເປັນຜູ້ປະກາດໃຊ້ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ ໃນລະດັບຂະແໜງການ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການຂອງສູນສະຖິຕິແຫ່ງຊາດ;

3. ສູນສະຖິຕິປະຈໍາແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ເປັນຜູ້ປະກາດໃຊ້ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການໃນລະດັບທ້ອງຖິ່ນ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການຂອງສູນສະຖິຕິແຫ່ງຊາດ;

4. ການສະໜອງຂໍ້ມູນສະຖິຕິທາງການ ໃຫ້ແກ່ຜູ້ນໍາໃຊ້ຂໍ້ມູນສະຖິຕິ ທັງພາຍໃນ ແລະ ຕ່າງປະເທດໂດຍຜ່ານປະຕູດຽວ ດ້ວຍລະບົບການເຜີຍແຜ່ຂໍ້ມູນສະຖິຕິທາງການ ຂອງການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະຂັ້ນ.

ການເຜີຍແຜ່ຂໍ້ມູນສະຖິຕິທາງການ ໃຫ້ປະຕິບັດໄດ້ດ້ວຍຫຼາຍຮູບແບບ ເຊັ່ນ ການຈັດກອງປະຊຸມ, ບົດລາຍງານສະຖິຕິ, ຜ່ານສື່ມວນຊົນ, ເວັບໄຊ ແລະ ຜ່ານລະບົບເອເລັກໂຕຣນິກ.

### ມາດຕາ 42 (ປັບປຸງ) ບຸກຄົນທີ່ມີສິດປະກາດໃຊ້ຜົນຂອງການສໍາຫຼວດ

ບຸກຄົນທີ່ມີສິດປະກາດໃຊ້ຜົນຂອງການສໍາຫຼວດ ມີ ດັ່ງນີ້:

1. ນາຍົກ ຫຼື ຮອງນາຍົກລັດຖະມົນຕີທີ່ເປັນຫົວໜ້າຄະນະຊີ້ນໍາການສໍາຫຼວດໃຫຍ່;

2. ຫົວໜ້າຄະນະຊີ້ນໍາການສໍາຫຼວດຕົວແທນລະດັບຊາດ;

3. ຫົວໜ້າສູນສະຖິຕິແຫ່ງຊາດ;

4. ຫົວໜ້າສູນສະຖິຕິປະຈໍາ ກະຊວງ, ອົງການລັດທຽບເທົ່າກະຊວງ;

5. ຫົວໜ້າສູນສະຖິຕິປະຈໍາແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ.

**ມາດຕາ 43 (ປັບປຸງ) ການເຂົ້າເຖິງ ແລະ ການນໍາໃຊ້ຂໍ້ມູນສະຖິຕິ**

ການເຂົ້າເຖິງ ແລະ ການນໍາໃຊ້ຂໍ້ມູນສະຖິຕິ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດເຂົ້າເຖິງ, ນໍາໃຊ້ຂໍ້ມູນສະຖິຕິ ຫຼື ຖານຂໍ້ມູນ ທີ່ໄດ້ປະກາດໃຊ້ ແລະ ເຜີຍແຜ່ ຈາກລະບົບການຈັດຕັ້ງສະຖິຕິແຫ່ງຊາດຢ່າງສະເໝີພາບ;

2. ຜູ້ນໍາໃຊ້ຂໍ້ມູນສະຖິຕິທີ່ເປັນ ຂໍ້ມູນດິບ ແລະ ຖານຂໍ້ມູນ ຕ້ອງໄດ້ລະບຸຈຸດປະສົງເປົ້າໝາຍຂອງການນໍາໃຊ້ ແລະ ແລກປ່ຽນຜົນຂອງການນໍາໃຊ້ຂໍ້ມູນກັບການຈັດຕັ້ງສະຖິຕິທີ່ກ່ຽວຂ້ອງ;

3. ຜູ້ນໍາໃຊ້ຂໍ້ມູນສະຖິຕິ, ຂໍ້ມູນດິບ ແລະ ຖານຂໍ້ມູນ ຕ້ອງກໍານົດລາຍລະອຽດກ່ຽວກັບທີ່ມາຂອງແຫຼ່ງຂໍ້ມູນ ໃນເວລານໍາໃຊ້ຢ່າງຈະແຈ້ງ.

## ພາກທີ V
## ການຈັດຕັ້ງສະຖິຕິແຫ່ງຊາດ

**ມາດຕາ 44 ລະບົບການຈັດຕັ້ງສະຖິຕິແຫ່ງຊາດ**

ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ປະກອບດ້ວຍ:

1. ການຈັດຕັ້ງສະຖິຕິລະບົບສາຍຕັ້ງ;

2. ການຈັດຕັ້ງສະຖິຕິລະບົບສາຍຂວາງ.

ໃນກໍລະນີທີ່ມີຄວາມຈໍາເປັນ ອາດຈະສ້າງຕັ້ງສະພາທີ່ປຶກສາດ້ານສະຖິຕິຂຶ້ນກໍໄດ້ ຕາມການຕົກລົງຂອງລັດຖະບານ.

## ໝວດທີ 1
## ການຈັດຕັ້ງສະຖິຕິລະບົບສາຍຕັ້ງ

**ມາດຕາ 45 (ປັບປຸງ) ການຈັດຕັ້ງສະຖິຕິລະບົບສາຍຕັ້ງ**

ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ປະກອບດ້ວຍ:

1. ສູນສະຖິຕິແຫ່ງຊາດ;

2. ສູນສະຖິຕິປະຈໍາແຂວງ, ນະຄອນຫຼວງ;

3. ສູນສະຖິຕິປະຈໍາເມືອງ, ເທດສະບານ, ນະຄອນ;

4. ຈຸງານສະຖິຕິປະຈໍາບ້ານ.

**ມາດຕາ 46 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນສະຖິຕິແຫ່ງຊາດ**

ສູນສະຖິຕິແຫ່ງຊາດ ມີຖານະທຽບເທົ່າທະບວງ, ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ, ຫົວໜ້າສູນສະຖິຕິແຫ່ງຊາດ ເປັນຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໂດຍຕຳແໜ່ງ.

ສູນສະຖິຕິແຫ່ງຊາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເສນາທິການໃຫ້ ກະຊວງແຜນການ ແລະ ການລົງທຶນ ໃນການຄົ້ນຄວ້າສ້າງຮ່າງນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ, ສ້າງ, ປັບປຸງກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສະຖິຕິ;

2. ຄົ້ນຄວ້າ ແລະ ສ້າງແຜນດຳເນີນງານ, ການສຳຫຼວດໃຫຍ່ ແລະ ການສຳຫຼວດແບບຕົວແທນລະດັບຊາດ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິ ເພື່ອສະເໜີ ຕໍ່ ກະຊວງແຜນການ ແລະ ການລົງທຶນ;

3. ໂຄສະນາ ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານສະຖິຕິໃນຂອບເຂດທົ່ວປະເທດ;

4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດ ແລະ ການເຄື່ອນໄຫວວຽກງານສະຖິຕິ;

5. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດທາງດ້ານວິຊາການ ຕາມວິທະຍາສາດດ້ານສະຖິຕິ, ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາລະບົບສະຖິຕິ ແລະ ແຜນດຳເນີນງານຂອງການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;

6. ສ້າງແຜນການຝຶກອົບຮົມ ແລະ ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ທາງດ້ານການຄຸ້ມຄອງວຽກງານສະຖິຕິ ແລະ ວິຊາການສະຖິຕິ ໃຫ້ແກ່ພະນັກງານ-ລັດຖະກອນ ໃນລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

7. ຄົ້ນຄວ້າ, ສ້າງ ແລະ ພັດທະນາ ຖານຂໍ້ມູນສະຖິຕິທາງການ ແລະ ສຳເນົາຖານຂໍ້ມູນສະຖິຕິແຫ່ງຊາດ ທີ່ສັງລວມຈາກການຈັດຕັ້ງສະຖິຕິແຫ່ງຊາດ ແລະ ຫົວໜ່ວຍພື້ນຖານ;

8. ອອກແບບ ການສຳຫຼວດ ແລະ ການເກັບກຳຂໍ້ມູນຈາກການລາຍງານບໍລິຫານ, ກຳນົດລະບົບຕົວຊີ້ບອກລະດັບຊາດ ໃນແຕ່ລະໄລຍະ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

9. ເຂົ້າເຖິງ, ນຳໃຊ້ ຖານຂໍ້ມູນທຸກປະເພດ ຂອງ ຫົວໜ່ວຍພື້ນຖານ ໂດຍປະສານສົມທົບກັບການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ;

10. ເກັບກຳ, ສັງລວມ ແລະ ທວງເອົາຂໍ້ມູນສະຖິຕິ ຈາກຫົວໜ່ວຍພື້ນຖານ; ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການໃນລະດັບຊາດ;

11. ປະສານງານກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານສະຖິຕິ;

12. ພົວພັນ, ຮ່ວມມື, ເຊັນສັນຍາ ແລະ ອະນຸສັນຍາ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຖິຕິ ຕາມການມອບໝາຍຂອງລັດຖະບານ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານສະຖິຕິ ຕໍ່ ກະຊວງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນສະຖິຕິປະຈຳແຂວງ, ນະຄອນຫຼວງ**

ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ຂຶ້ນກັບ ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ.

ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ ແລະ ເຜີຍແຜ່ ນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານ ກ່ຽວກັບວຽກງານສະຖິຕິ;

2. ຄົ້ນຄວ້າ ແລະ ສ້າງແຜນດຳເນີນງານ, ການສຳຫຼວດລະດັບແຂວງ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິ ເພື່ອສະເໜີ ຕໍ່ ພະແນກ ແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ;

3. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດທາງດ້ານວິຊາການຕາມວິທະຍາສາດດ້ານສະຖິຕິ, ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແລະ ແຜນດຳເນີນງານທາງດ້ານສະຖິຕິໃນຂັ້ນຂອງຕົນ ໃນແຕ່ລະໄລຍະ;

4. ຈັດຕັ້ງປະຕິບັດ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ແຜນດຳເນີນງານຂອງສູນສະຖິຕິແຫ່ງຊາດ;

5. ສ້າງແຜນການຝຶກອົບຮົມ ແລະ ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານດ້ານສະຖິຕິໃຫ້ແກ່ພະນັກງານ-ລັດຖະກອນຂອງຕົນ ແລະ ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງພາຍໃນແຂວງ, ນະຄອນຫຼວງ;

6. ຄົ້ນຄວ້າ, ສ້າງ ແລະ ພັດທະນາ ຖານຂໍ້ມູນສະຖິຕິທາງການ ແລະ ສຳເນົາຖານຂໍ້ມູນສະຖິຕິຂອງແຂວງ, ນະຄອນຫຼວງ ທີ່ສັງລວມຈາກການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ແລະ ຫົວໜ່ວຍພື້ນຖານ ພາຍໃນທ້ອງຖິ່ນຕົນ;

7. ອອກແບບການສຳຫຼວດ ແລະ ການເກັບກຳຂໍ້ມູນຈາກການລາຍງານບໍລິຫານ, ກຳນົດຕົວຊີ້ບອກລະດັບແຂວງໃນແຕ່ລະໄລຍະ ບົນພື້ນຖານຫຼັກການເກັບກຳຂໍ້ມູນ ຂອງສູນສະຖິຕິແຫ່ງຊາດ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

8. ເຂົ້າເຖິງ, ນຳໃຊ້ ຖານຂໍ້ມູນທຸກປະເພດ ຂອງຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ;

9. ເກັບກຳ, ສັງລວມ ແລະ ທວງເອົາຂໍ້ມູນສະຖິຕິ ຈາກການຈັດຕັ້ງສະຖິຕິລະບົບສາຍຕັ້ງ, ສາຍຂວາງ ແລະ ຫົວໜ່ວຍພື້ນຖານ; ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ;

10. ປະສານສົມທົບກັບບັນດາພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານສະຖິຕິ;

11. ພົວພັນ, ຮ່ວມມື ກັບ ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ຢູ່ ສປປ ລາວ ແລະ ຕ່າງປະເທດ ກ່ຽວກັບວຽກງານສະຖິຕິ ຕາມການມອບໝາຍຂອງຂັ້ນເທິງ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ສູນສະຖິຕິແຫ່ງຊາດ ແລະ ອົງການຄຸ້ມຄອງວຽກງານສະຖິຕິຂອງຕົນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ**

ສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ຂຶ້ນກັບຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ, ນະຄອນ.

ສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແລະ ແຜນພັດທະນາລະບົບສະຖິຕິຂອງແຂວງ, ນະຄອນຫຼວງ;

2. ຄົ້ນຄວ້າ ແລະ ສ້າງແຜນດຳເນີນງານ, ການສຳຫຼວດລະດັບເມືອງ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິ ເພື່ອສະເໜີ ຕໍ່ ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ;

3. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດທາງດ້ານວິຊາການຕາມວິທະຍາສາດດ້ານສະຖິຕິ, ແຜນດຳເນີນງານທາງດ້ານສະຖິຕິໃນຂັ້ນຂອງຕົນ ແລະ ວຽກງານສະຖິຕິຂອງຈຸງານສະຖິຕິບ້ານ ໃນແຕ່ລະໄລຍະ;

4. ຈັດຕັ້ງປະຕິບັດຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ແຜນດຳເນີນງານຂອງສູນສະຖິຕິປະຈຳແຂວງ, ນະຄອນຫຼວງ;

5. ສ້າງແຜນການຝຶກອົບຮົມ, ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານດ້ານສະຖິຕິໃຫ້ແກ່ລັດຖະກອນຂອງເມືອງ, ເທດສະບານ, ນະຄອນ ແລະ ຈຸງານສະຖິຕິປະຈຳບ້ານ;

6. ຄົ້ນຄວ້າ, ສ້າງ ແລະ ພັດທະນາ ຖານຂໍ້ມູນສະຖິຕິທາງການ ແລະ ສຳເນົາຖານຂໍ້ມູນສະຖິຕິຂອງເມືອງ, ເທດສະບານ, ນະຄອນ ທີ່ສັງລວມຈາກການຈັດຕັ້ງສະຖິຕິລະບົບສາຍຕັ້ງ, ສາຍຂວາງ ແລະ ຫົວໜ່ວຍພື້ນຖານພາຍໃນທ້ອງຖິ່ນຕົນ;

7. ອອກແບບການສຳຫຼວດ ແລະ ການເກັບກຳການລາຍງານບໍລິຫານ, ກຳນົດຕົວຊີ້ບອກລະດັບເມືອງ ໃນແຕ່ລະໄລຍະ ບົນພື້ນຖານຫຼັກການເກັບກຳຂໍ້ມູນຂອງສູນສະຖິຕິແຫ່ງຊາດ ໂດຍປະສານສົມ

ທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

8. ເຂົ້າເຖິງ, ນຳໃຊ້ ຖານຂໍ້ມູນທຸກປະເພດຂອງຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ;

9. ເກັບກຳ, ສັງລວມ ແລະ ທວງ ເອົາຂໍ້ມູນສະຖິຕິ ຈາກການຈັດຕັ້ງສະຖິຕິລະບົບສາຍຕັ້ງ, ສາຍຂວາງ ແລະ ຫົວໜ່ວຍພື້ນຖານ; ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ;

10. ປະສານສົມທົບກັບບັນດາຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານສະຖິຕິ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ແລະ ອົງການຄຸ້ມຄອງວຽກງານສະຖິຕິຂອງຕົນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຈຸງານສະຖິຕິປະຈຳບ້ານ

ຈຸງານສະຖິຕິປະຈຳບ້ານ ແມ່ນ ພາກສ່ວນໜຶ່ງຂອງໜ່ວຍງານເສດຖະກິດ-ການເງິນ ຂອງອົງການປົກຄອງບ້ານ ໂດຍແມ່ນຄະນະບ້ານທ່ານໃດໜຶ່ງ ເປັນຜູ້ຊີ້ນຳນຳພາ ຕາມການມອບໝາຍຂອງນາຍບ້ານ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ.

ຈຸງານສະຖິຕິປະຈຳບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເກັບກຳ ແລະ ສັງລວມ ຂໍ້ມູນສະຖິຕິຈາກຄົວເຮືອນ ແລະ ຫົວໜ່ວຍພື້ນຖານ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ;

2. ຄຸ້ມຄອງ ແລະ ເກັບຮັກສາ ປຶ້ມສະຖິຕິປະຈຳບ້ານ ເພື່ອໃຫ້ມີຊຸດຂໍ້ມູນພື້ນຖານໃນແຕ່ລະໄລຍະຢ່າງເປັນປົກກະຕິ ແລະ ຄົ້ນຄວ້າສ້າງຖານຂໍ້ມູນສະຖິຕິ;

3. ເຂົ້າຮ່ວມເກັບກຳຂໍ້ມູນການສຳຫຼວດ ແລະ ການລາຍງານບໍລິຫານ ຂອງການຈັດຕັ້ງສະຖິຕິໃນແຕ່ລະໄລຍະ;

4. ໄດ້ຮັບການບຳລຸງ ແລະ ຝຶກອົບຮົມດ້ານວິຊາການສະຖິຕິ;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການຈັດຕັ້ງສະຖິຕິລະບົບສາຍຂວາງ

### ມາດຕາ 50 (ປັບປຸງ) ການຈັດຕັ້ງສະຖິຕິລະບົບສາຍຂວາງ

ການຈັດຕັ້ງສະຖິຕິລະບົບສາຍຂວາງ ປະກອບດ້ວຍ:

- ລະບົບການຈັດຕັ້ງຂອງບັນດາຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ;

- ການຈັດຕັ້ງສະຖິຕິຂອງຫົວໜ່ວຍພື້ນຖານ.

1. ລະບົບການຈັດຕັ້ງຂອງບັນດາຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ ປະກອບດ້ວຍ:

- ສູນສະຖິຕິປະຈຳກະຊວງ, ອົງການລັດທຽບເທົ່າກະຊວງ;

- ຂະແໜງສະຖິຕິປະຈຳພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ;

- ໜ່ວຍງານສະຖິຕິປະຈຳຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ.

ນາຍົກລັດຖະມົນຕີ ອອກຄຳສັ່ງ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງເປັນຜູ້ອອກຂໍ້ຕົກລົງກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິປະຈຳຂະແໜງການຕົນ ໂດຍສອດຄ່ອງກັບ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

2. ການຈັດຕັ້ງສະຖິຕິຂອງຫົວໜ່ວຍພື້ນຖານ ມີຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ.

**ມາດຕາ 51 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນສະຖິຕິປະຈຳກະຊວງ, ອົງການລັດທຽບເທົ່າກະຊວງ**

ສູນສະຖິຕິປະຈຳກະຊວງ, ອົງການລັດທຽບເທົ່າກະຊວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ, ກົດໝາຍ, ລະບຽບການ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານສະຖິຕິໃນຂະແໜງການຂອງຕົນ;

3. ຄົ້ນຄວ້າ, ສ້າງແຜນພັດທະນາລະບົບສະຖິຕິຂອງຂະແໜງການຕົນ, ການສຳຫຼວດແບບຕົວແທນລະດັບຂະແໜງການ ແລະ ການສຳຫຼວດສະເພາະຂອງຕົນໃນແຕ່ລະໄລຍະ ເພື່ອສະເໜີຕໍ່ກະຊວງ, ອົງການລັດທຽບເທົ່າກະຊວງທີ່ຕົນຂຶ້ນກັບ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການສະຖິຕິຈາກສູນສະຖິຕິແຫ່ງຊາດ;

4. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດທາງດ້ານວິຊາການຕາມວິທະຍາສາດດ້ານສະຖິຕິ ແລະ ແຜນດຳເນີນງານທາງດ້ານສະຖິຕິຂອງຫ້ອງການ, ບັນດາກົມພາຍໃນກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ການຈັດຕັ້ງສະຖິຕິຂັ້ນທ້ອງຖິ່ນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃນແຕ່ລະໄລຍະ;

5. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດ ແລະ ການເຄື່ອນໄຫວວຽກງານສະຖິຕິ;

6. ສ້າງແຜນຝຶກອົບຮົມ ແລະ ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ດ້ານສະຖິຕິໃຫ້ແກ່ພະນັກງານ-ລັດຖະກອນ;

7. ຄົ້ນຄວ້າ, ສ້າງ, ພັດທະນາ ຖານຂໍ້ມູນສະຖິຕິທາງການຂອງຂະແໜງການຕົນ ທີ່ສັງລວມຈາກຫ້ອງການ, ບັນດາກົມພາຍໃນກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງ;

8. ອອກແບບການສຳຫຼວດ ແລະ ການເກັບກຳການລາຍງານບໍລິຫານ, ກຳນົດຕົວຊີ້ບອກລະດັບຂະແໜງການຂອງຕົນໃນແຕ່ລະໄລຍະ ບົນພື້ນຖານຫຼັກການເກັບກຳຂໍ້ມູນ ຂອງສູນສະຖິຕິແຫ່ງຊາດ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

9. ເຂົ້າເຖິງ, ນຳໃຊ້ຖານຂໍ້ມູນທຸກປະເພດຂອງຫ້ອງການ, ບັນດາກົມພາຍໃນກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງກັບຂະແໜງການຕົນ;

10. ເກັບກຳ, ສັງລວມ ແລະ ທວງເອົາ ຂໍ້ມູນສະຖິຕິຈາກຫ້ອງການ, ບັນດາກົມພາຍໃນກະຊວງ ອົງການລັດທຽບເທົ່າກະຊວງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ; ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການໃນລະດັບຂະແໜງການຕົນ;

11. ປະສານສົມທົບກັບຫ້ອງການ, ບັນດາກົມພາຍໃນກະຊວງ, ອົງການລັດທຽບເທົ່າກະຊວງທີ່ຕົນຂຶ້ນກັບ, ການຈັດຕັ້ງສະຖິຕິລະບົບສາຍຕັ້ງ, ສາຍຂວາງ ແລະ ພາກສ່ວນອື່ນ ກ່ຽວກັບ ວຽກງານສະຖິຕິ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ ກະຊວງ, ອົງການລັດທຽບເທົ່າກະຊວງຂອງຕົນ ແລະ ສູນສະຖິຕິແຫ່ງຊາດ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງສະຖິຕິປະຈຳພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ**

ຂະແໜງສະຖິຕິປະຈຳພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແລະ ແຜນພັດທະນາລະບົບສະຖິຕິ, ກົດໝາຍ ແລະ ລະບຽບການ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານສະຖິຕິ;

3. ຄົ້ນຄວ້າ, ສ້າງແຜນພັດທະນາລະບົບສະຖິຕິ, ການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະໃນລະດັບທ້ອງຖິ່ນຂອງຕົນໃນແຕ່ລະໄລຍະ ເພື່ອສະເໜີຕໍ່ພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ທີ່ຕົນຂຶ້ນກັບ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການສະຖິຕິຈາກສູນສະຖິຕິປະຈຳແຂວງ, ນະຄອນຫຼວງ;

4. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້ວິທະຍາສາດດ້ານສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດຳເນີນງານຂອງບັນດາຂະແໜງພາຍໃນພະແນກ,

ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ແລະ ການຈັດຕັ້ງສະຖິຕິຂອງບັນດາຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ໃນແຕ່ລະໄລຍະ;

5. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດ ແລະ ການເຄື່ອນໄຫວວຽກງານສະຖິຕິ;

6. ສ້າງແຜນຝຶກອົບຮົມ ແລະ ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານດ້ານສະຖິຕິໃຫ້ແກ່ລັດຖະກອນ;

7. ຄົ້ນຄວ້າ, ສ້າງ, ພັດທະນາຖານຂໍ້ມູນສະຖິຕິທາງການ ທີ່ສັງລວມຈາກບັນດາຂະແໜງພາຍໃນພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງ;

8. ອອກແບບ ການສຳຫຼວດ ແລະ ການເກັບກຳການລາຍງານບໍລິຫານ, ກຳນົດຕົວຊີ້ບອກລະດັບຂະແໜງການຂອງຕົນ ໃນແຕ່ລະໄລຍະ ບົນພື້ນຖານຫຼັກການເກັບກຳຂໍ້ມູນຂອງສູນສະຖິຕິແຫ່ງຊາດ ແລະ ກະຊວງ, ອົງການລັດທຽບເທົ່າກະຊວງ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

9. ເຂົ້າເຖິງ, ນຳໃຊ້ຖານຂໍ້ມູນທຸກປະເພດຂອງບັນດາຂະແໜງພາຍໃນພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງກັບຂະແໜງການຕົນ;

10. ເກັບກຳ, ສັງລວມ ແລະ ທວງເອົາຂໍ້ມູນສະຖິຕິ ຈາກຂະແໜງທີ່ຂຶ້ນກັບພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ; ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການຕົນ;

11. ປະສານສົມທົບກັບບັນດາຂະແໜງພາຍໃນພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ ທີ່ຕົນຂຶ້ນກັບ ແລະ ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນກ່ຽວກັບວຽກງານສະຖິຕິ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິຕໍ່ ພະແນກ, ອົງການລັດທຽບເທົ່າພະແນກຂອງຕົນ ແລະ ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ຂອງໜ່ວຍງານສະຖິຕິປະຈຳຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ**

ໜ່ວຍງານສະຖິຕິປະຈຳຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ, ແຜນພັດທະນາລະບົບສະຖິຕິຂອງຂະແໜງການ, ແຂວງ, ນະຄອນຫຼວງ, ກົດໝາຍ ແລະ ລະບຽບການ;

2. ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານສະຖິຕິ;

3. ຄົ້ນຄວ້າ, ສ້າງແຜນພັດທະນາລະບົບສະຖິຕິ ຂອງຂະແໜງການຕົນ, ການສຳຫຼວດຕົວແທນ ແລະ ການສຳຫຼວດສະເພາະໃນລະດັບທ້ອງຖິ່ນຂອງຕົນໃນແຕ່ລະໄລຍະ ເພື່ອສະເໜີຕໍ່ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງທາງດ້ານວິຊາການສະຖິຕິຈາກສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ;

4. ຄຸ້ມຄອງ ແລະ ພັດທະນາລະບົບສະຖິຕິ; ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດແຜນດຳເນີນງານ ໃນແຕ່ລະໄລຍະ;

5. ອອກ ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດ ແລະ ການເຄື່ອນໄຫວວຽກງານສະຖິຕິ;

6. ສ້າງແຜນຝຶກອົບຮົມ, ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ດ້ານສະຖິຕິໃຫ້ແກ່ລັດຖະກອນ;

7. ຄົ້ນຄວ້າ, ສ້າງ, ພັດທະນາ ຖານຂໍ້ມູນສະຖິຕິທາງການ ທີ່ສັງລວມຈາກບັນດາໜ່ວຍງານພາຍໃນຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງ;

8. ອອກແບບການສຳຫຼວດ ແລະ ການເກັບກຳການລາຍງານບໍລິຫານ, ກຳນົດຕົວຊີ້ບອກຂອງໜ່ວຍງານຕົນໃນແຕ່ລະໄລຍະ ບົນພື້ນຖານຫຼັກການ ການເກັບກຳຂໍ້ມູນຂອງສູນສະຖິຕິແຫ່ງຊາດ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

9. ເຂົ້າເຖິງ, ນຳໃຊ້ ຖານຂໍ້ມູນທຸກປະເພດຂອງບັນດາໜ່ວຍງານພາຍໃນຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງກັບໜ່ວຍງານຕົນ;

10. ເກັບກຳ, ສັງລວມ ແລະ ທວງເອົາຂໍ້ມູນສະຖິຕິ ຈາກໜ່ວຍງານທີ່ຂຶ້ນກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ຫົວໜ່ວຍພື້ນຖານທີ່ກ່ຽວຂ້ອງກັບໜ່ວຍງານຕົນ; ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການຂອງຕົນ;

11. ປະສານສົມທົບກັບບັນດາໜ່ວຍງານຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ທີ່ຕົນຂຶ້ນກັບ ແລະ ສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນກ່ຽວກັບວຽກງານສະຖິຕິ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງຕົນ ແລະ ສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ຂອງຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ**

ຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ ແມ່ນ ປະທານ ຫຼື ຜູ້ອຳນວຍການ ຫຼື ເຈົ້າຂອງຫົວໜ່ວຍພື້ນຖານ ເປັນຜູ້ອອກຂໍ້ຕົກລົງແຕ່ງຕັ້ງຈຸງານສະຖິຕິຂອງຕົນ ເພື່ອຈັດຕັ້ງປະຕິບັດວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ຈຸງານສະຖິຕິຂອງຫົວໜ່ວຍພື້ນຖານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເກັບກຳສັງລວມ ແລະ ສະໜອງຂໍ້ມູນສະຖິຕິ ກ່ຽວກັບສະພາບການເຄື່ອນໄຫວຂອງຫົວໜ່ວຍພື້ນຖານຕົນ ໃຫ້ແກ່ການຈັດຕັ້ງສະຖິຕິແຫ່ງຊາດ ຕາມລະບົບການສຳຫຼວດ ແລະ ການລາຍງານບໍລິຫານ;

2. ບັນທຶກຢ່າງເປັນລະບົບ ແລະ ເກັບຮັກສາຂໍ້ມູນສະຖິຕິຂອງຫົວໜ່ວຍພື້ນຖານຂອງຕົນ ເພື່ອໃຫ້ມີຊຸດຂໍ້ມູນພື້ນຖານໃນແຕ່ລະໄລຍະຢ່າງເປັນປົກກະຕິ ເພື່ອສະໜອງໃຫ້ທຸກພາກສ່ວນໃຫ້ມີຄວາມເປັນເອກະພາບ;

3. ໄດ້ຮັບການບຳລຸງ ແລະ ຝຶກອົບຮົມດ້ານວິຊາການສະຖິຕິ;

4. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ໃຫ້ແກ່ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ຂໍ້ຫ້າມ

### ມາດຕາ 55 (ປັບປຸງ) ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ພະນັກງານສະຖິຕິ

ຫ້າມການຈັດຕັ້ງ ແລະ ພະນັກງານສະຖິຕິ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍ, ເຜີຍແຜ່ຂໍ້ມູນສະເພາະຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂອງກົດໝາຍສະບັບນີ້;

2. ປອມແປງ, ບິດເບືອນຂໍ້ມູນສະຖິຕິທາງການ ແລະ ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍຕໍ່ຜູ້ອື່ນ ໂດຍເຈດຕະນາ;

3. ນຳໃຊ້ຂໍ້ມູນສະຖິຕິ ແລະ ບົດລາຍງານທີ່ໄດ້ຮັບຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ດຳເນີນກິດຈະກຳ ຢູ່ ສປປ ລາວ ເພື່ອໃຊ້ເປັນບ່ອນອີງໃນການກວດກາ ແລະ ກວດສອບ ການເຄື່ອນໄຫວທຸລະກິດ ຫຼື ເພື່ອການຄິດໄລ່ໃນການເກັບພາສີ ຫຼື ອາກອນ;

4. ລະເມີດຈັນຍາບັນທາງດ້ານສະຖິຕິ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 56 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງຂໍ້ມູນສະຖິຕິ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສະໜອງຂໍ້ມູນສະຖິຕິ ມີ ພຶດຕິກຳ ດັ່ງນີ້:

1. ລາຍງານຂໍ້ມູນສະຖິຕິທີ່ບໍ່ມີຄວາມຈິງ;

2. ເຜີຍແຜ່ ແລະ ສະໜອງຂໍ້ມູນທີ່ບໍ່ແມ່ນຄວາມຮັບຜິດຊອບຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;

3. ປອມແປງ, ບິດເບືອນຂໍ້ມູນສະຖິຕິທາງການ ແລະ ຂໍ້ມູນສະເພາະຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໂດຍເຈດຕະນາ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 57 (ປັບປຸງ) ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນໍາໃຊ້ຂໍ້ມູນສະຖິຕິ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນໍາໃຊ້ຂໍ້ມູນສະຖິຕິ ມີ ພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນທາງທີ່ບໍ່ຖືກຕ້ອງ ແລະ ເພື່ອຈຸດປະສົງອື່ນທີ່ບໍ່ແມ່ນສະຖິຕິ;

2. ນໍາໃຊ້ຂໍ້ມູນສະຖິຕິ ເພື່ອຈຸດປະສົງສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຫຼື ທໍາລາຍການດໍາເນີນທຸລະກິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;

3. ສະໜອງຖານຂໍ້ມູນດິບ ຈາກການສໍາຫຼວດ ທີ່ໄດ້ມາຈາກການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ໃຫ້ບຸກຄົນທີສາມ ເພື່ອຈຸດປະສົງອື່ນທີ່ບໍ່ແມ່ນສະຖິຕິ;

4. ບັງຄັບບຸກຄົນໃດໜຶ່ງໃຫ້ເປີດເຜີຍ, ລາຍງານ ແລະ ປະກາດໃຊ້ຂໍ້ມູນທີ່ຜິດກັບຄວາມເປັນຈິງ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາ ວຽກງານສະຖິຕິ
### ໝວດທີ 1
### ການຄຸ້ມຄອງວຽກງານສະຖິຕິ

**ມາດຕາ 58 (ປັບປຸງ) ອົງການຄຸ້ມຄອງວຽກງານສະຖິຕິ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສະຖິຕິ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສະຖິຕິ ປະກອບດ້ວຍ:

1. ກະຊວງແຜນການ ແລະ ການລົງທຶນ;

2. ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ;

3. ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ;

4. ກະຊວງ, ອົງການລັດທຽບເທົ່າກະຊວງ, ພະແນກ, ອົງການລັດທຽບເທົ່າພະແນກ ຂອງແຂວງ, ນະຄອນຫຼວງ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ.

### ມາດຕາ 59 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ

ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງນະໂຍບາຍ ແລະ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແລ້ວສະເໜີ ລັດຖະບານ ພິຈາລະນາ;

2. ສ້າງ, ປັບປຸງ ແລະ ສະເໜີກົດໝາຍກ່ຽວກັບວຽກງານສະຖິຕິ ຕໍ່ ລັດຖະບານ ເພື່ອນໍາສະເໜີ ສະພາແຫ່ງຊາດ ພິຈາລະນາ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ສະຖິຕິ ໃນຂອບເຂດທົ່ວປະເທດ;

4. ພິຈາລະນາ ອະນຸມັດແຜນດໍາເນີນງານ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບວຽກງານ ສະຖິຕິ ໃນແຕ່ລະໄລຍະ;

5. ຊີ້ນໍາ, ນໍາພາ, ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການພັດທະນາລະບົບສະຖິຕິແຫ່ງຊາດ; ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການພັດທະນາ ແລະ ການເຄື່ອນໄຫວວຽກງານສະຖິຕິ;

6. ອອກຂໍ້ຕົກລົງແຕ່ງຕັ້ງ ຄະນະຊີ້ນໍາການສໍາຫຼວດຕົວແທນລະດັບຊາດໃນແຕ່ລະໄລຍະ ຕາມ ການສະເໜີຂອງສູນສະຖິຕິແຫ່ງຊາດ;

7. ຄົ້ນຄວ້າ ສະເໜີ ນາຍົກລັດຖະມົນຕີ ອະນຸມັດການສໍາຫຼວດໃຫຍ່ ແລະ ຄົ້ນຄວ້າ ພິຈາລະນາ ອະນຸມັດ ການສໍາຫຼວດແບບຕົວແທນລະດັບຊາດ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ;

8. ກໍານົດຕົວຊີ້ບອກ ເພື່ອຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

9. ຊີ້ນໍາ, ຕິດຕາມ ແລະ ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງ ການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ໃນການສະໜັບສະໜູນ ແລະ ອໍານວຍຄວາມສະດວກໃຫ້ ແກ່ການຈັດຕັ້ງປະຕິບັດວຽກງານສະຖິຕິ;

10. ພົວພັນ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນການພັດທະນາ ແລະ ສະໜັບສະໜູນ ແຫຼ່ງທຶນເຂົ້າໃນວຽກງານສະຖິຕິ;

11. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ ລັດຖະບານ ຢ່າງ ເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງວຽກງານສະຖິຕິ ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຮ່າງຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແລະ ແຜນພັດທະນາລະບົບສະຖິຕິຂັ້ນແຂວງ;

2. ພິຈາລະນາ ອະນຸມັດ ແຜນດຳເນີນງານ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິຂອງແຂວງ, ນະຄອນຫຼວງ ໃນແຕ່ລະໄລຍະ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະຖິຕິ;

4. ຊີ້ນຳ, ນຳພາ, ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການພັດທະນາ ວຽກງານສະຖິຕິຂອງແຂວງ, ນະຄອນຫຼວງ; ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນດຳເນີນງານ ແລະ ການເຄື່ອນໄຫວຂອງສູນສະຖິຕິປະຈຳແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ;

5. ຄົ້ນຄວ້າ ສະເໜີອົງການປົກຄອງແຂວງ, ນະຄອນຫຼວງ ເພື່ອອະນຸມັດການສຳຫຼວດລະດັບແຂວງ, ນະຄອນຫຼວງ ຕາມການສະເໜີຂອງສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ແລະ ການແນະນຳຂອງສູນສະຖິຕິແຫ່ງຊາດ;

6. ກຳນົດຕົວຊີ້ບອກ ເພື່ອຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ນະຄອນຫຼວງ ໃນແຕ່ລະໄລຍະ;

7. ຊີ້ນຳ, ຕິດຕາມ ແລະ ປະສານສົມທົບກັບບັນດາພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນ ໃນການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານສະຖິຕິ;

8. ພົວພັນ, ຮ່ວມມື, ເຊັນສັນຍາ ແລະ ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບວຽກງານສະຖິຕິກັບອົງການຈັດຕັ້ງສັງຄົມ ຢູ່ ສປປ ລາວ ໃນການພັດທະນາ ແລະ ການສະໜັບສະໜູນແຫຼ່ງທຶນເຂົ້າໃນວຽກງານສະຖິຕິ ຕາມການຕົກລົງເຫັນດີຂອງ ກະຊວງແຜນການ ແລະ ການລົງທຶນ;

9. ສະຫຼຸບ, ສັງລວມ ແລະ ລາຍງານ ການເຄື່ອນໄຫວວຽກງານສະຖິຕິຕໍ່ ອົງການປົກຄອງແຂວງ ນະຄອນຫຼວງ ແລະ ກະຊວງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສະຖິຕິ ຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງແຜນພັດທະນາລະບົບສະຖິຕິຂັ້ນແຂວງ ແລະ ແຜນດຳເນີນງານສະຖິຕິຂັ້ນເມືອງ;

2. ພິຈາລະນາ ອະນຸມັດ ແຜນດຳເນີນງານ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິຂອງສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ໃນແຕ່ລະໄລຍະ;

3. ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສະຖິຕິ;

4. ຊີ້ນຳ, ນຳພາ, ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການພັດທະນາວຽກງານສະຖິຕິຂອງເມືອງ, ເທດສະບານ, ນະຄອນ; ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນດຳເນີນງານ ແລະ ການເຄື່ອນໄຫວຂອງສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ແລະ ຈຸງານສະຖິຕິປະຈຳບ້ານ;

5. ຄົ້ນຄວ້າ ສະເໜີ ຕໍ່ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ເພື່ອອະນຸມັດການສຳຫຼວດລະດັບເມືອງ ຕາມການສະເໜີຂອງສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ແລະ ການແນະນຳຂອງສູນສະຖິຕິແຫ່ງຊາດ;

6. ກຳນົດຕົວຊີ້ບອກ ເພື່ອຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ, ເທດສະບານ, ນະຄອນ ໃນແຕ່ລະໄລຍະ;

7. ຊີ້ນຳ, ຕິດຕາມ ແລະ ປະສານສົມທົບກັບ ບັນດາຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນ ໃນການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານສະຖິຕິ;

8. ສະຫຼຸບ, ສັງລວມ ແລະ ລາຍງານ ການເຄື່ອນໄຫວວຽກງານສະຖິຕິ ຕໍ່ ອົງການປົກຄອງເມືອງເທດສະບານ, ນະຄອນ ແລະ ພະແນກແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ

ໃນການຄຸ້ມຄອງວຽກງານສະຖິຕິ ກະຊວງ, ອົງການລັດທຽບເທົ່າກະຊວງ, ພະແນກ, ອົງການລັດທຽບເທົ່າພະແນກຂອງແຂວງ, ນະຄອນຫຼວງ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊຸກຍູ້, ຕິດຕາມ, ໃຫ້ການສະໜັບສະໜູນ ການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ, ກົດໝາຍ, ລະບຽບການ ແລະ ແຜນດຳເນີນງານກ່ຽວກັບວຽກງານສະຖິຕິ;

2. ຄົ້ນຄວ້າ ແລະ ພິຈາລະນາ ແຜນດຳເນີນງານ, ໂຄງການ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິ ໃນແຕ່ລະໄລຍະ;

3. ໂຄສະນາ, ເຜີຍແຜ່, ຊີ້ນຳ, ຕິດຕາມການປະຕິບັດວຽກງານສະຖິຕິຂອງການຈັດຕັ້ງສະຖິຕິ ທີ່ຂຶ້ນກັບຕົນ;

4. ຊີ້ນຳ, ນຳພາ, ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການພັດທະນາວຽກງານສະຖິຕິ; ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນດຳເນີນງານ ແລະ ການເຄື່ອນໄຫວຂອງການຈັດຕັ້ງສະຖິຕິທີ່ຂຶ້ນກັບຕົນ;

5. ກຳນົດຕົວຊີ້ບອກ ເພື່ອຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

6. ປະສານ ແລະ ຊຸກຍູ້ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານສະຖິຕິ;

7. ສະຫຼຸບ, ສັງລວມ ແລະ ລາຍງານ ການເຄື່ອນໄຫວວຽກງານສະຖິຕິ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານສະຖິຕິ

### ມາດຕາ 63 (ປັບປຸງ) ອົງການກວດກາວຽກງານສະຖິຕິ

ອົງການກວດກາວຽກງານສະຖິຕິ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານສະຖິຕິຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

ສູນສະຖິຕິແຫ່ງຊາດ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຕິດຕາມ ແລະ ກວດກາວຽກງານສະຖິຕິ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 64 (ປັບປຸງ) ຈຸດປະສົງການກວດກາ

ການກວດກາວຽກງານສະຖິຕິ ມີຈຸດປະສົງເຮັດໃຫ້ການຄຸ້ມຄອງການເຄື່ອນໄຫວວຽກງານ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມກົດໝາຍ.

### ມາດຕາ 65 (ປັບປຸງ) ເນື້ອໃນການກວດກາ

ເນື້ອໃນການກວດກາ ແມ່ນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດກົດໝາຍ, ຍຸດທະສາດ,

ນະໂຍບາຍ ແລະ ແຜນດຳເນີນງານກ່ຽວກັບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ.

**ມາດຕາ 66 (ປັບປຸງ) ແຜນການ ການກວດກາ**

ອົງການກວດກາພາຍໃນ ສ້າງແຜນການດຳເນີນການກວດກາຂອງຕົນຂຶ້ນ ເພື່ອຕິດຕາມ, ກວດກາວຽກງານສະຖິຕິ ທີ່ຕິດພັນກັບການປະຕິບັດກິດຈະກຳ ແລະ ຜົນຜະລິດສະຖິຕິ ທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານແຕ່ລະໄລຍະ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ.

ສຳລັບ ອົງການກວດກາພາຍນອກ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 67 ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ມີລັກສະນະກວດກາ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງ ເທື່ອຕໍ່ປີ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ລ່ວງໜ້າກ່ອນ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ແຕ່ການກວດການັ້ນ ໃຫ້ດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ ແລະ ການລົງປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

**ມາດຕາ 68 (ປັບປຸງ) ການລາຍງານ ແລະ ການແກ້ໄຂຜົນຂອງການກວດກາ**

ຄະນະກວດກາ ຕ້ອງສ້າງບົດບັນທຶກການກວດກາ, ບົດລາຍງານ ພ້ອມທັງສະເໜີວິທີການແກ້ໄຂຕໍ່ການລະເມີດ ແລະ ລາຍງານຕໍ່ອົງການທີ່ມີສິດອຳນາດກ່ຽວຂ້ອງພິຈາລະນາ ກ່ຽວກັບຜົນຂອງການກວດກາ.

ຄະນະກວດກາ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບການສະຫຼຸບລາຍງານຜົນຂອງການກວດກາ ແລະ ຮັກສາຄວາມລັບດ້ານເອກະສານສະຖິຕິ ທີ່ໄດ້ກວດກາຢ່າງເຂັ້ມງວດ.

**ມາດຕາ 69 (ປັບປຸງ) ສິດ ແລະ ພັນທະຂອງເປົ້າໝາຍທີ່ຖືກກວດກາ**

ເປົ້າໝາຍທີ່ຖືກກວດກາ ມີ ສິດ ແລະ ພັນທະ ດັ່ງນີ້:

1. ຮ້ອງຂໍໃຫ້ຄະນະກວດກາ ນຳສະເໜີຂໍ້ຕົກລົງ ກ່ຽວກັບການກວດກາ ແລະ ບັດອະນຸຍາດກວດກາ;

2. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການກວດກາທີ່ບໍ່ຖືກຕ້ອງ ຕາມຫຼັກການ ແລະ ລະບຽບການ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ;

3. ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງຄະນະກວດກາ, ສະໜອງເອກະສານ, ຂໍ້ມູນ, ຫຼັກຖານ ແລະ ຕອບບັນຫາທີ່ພົວພັນເຖິງເນື້ອໃນການກວດກາ ຕາມການສະເໜີຂອງຄະນະກວດກາ.

## ພາກທີ VIII
## ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

### ມາດຕາ 70 (ປັບປຸງ) ງົບປະມານ

ງົບປະມານ ຂອງສູນສະຖິຕິແຫ່ງຊາດ ແມ່ນ ຫົວໜ່ວຍງົບປະມານຂັ້ນໜຶ່ງ ຂອງງົບປະມານແຫ່ງລັດ; ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ເປັນຫົວໜ່ວຍງົບປະມານໜຶ່ງ ທີ່ຂຶ້ນກັບອົງການປົກຄອງທ້ອງຖິ່ນ.

ການສະໜອງ ແລະ ການນຳໃຊ້ງົບປະມານ ຕາມລະບົບສາຍຕັ້ງ ແລະ ສາຍຂວາງ ໃຫ້ປະຕິບັດຕາມແຜນກິດຈະກຳຂອງການຈັດຕັ້ງສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ.

ທຶນໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ໄດ້ມາຈາກງົບປະມານແຫ່ງລັດ, ການສະໜັບສະໜູນຊ່ວຍເຫຼືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ການປະກອບສ່ວນຂອງສັງຄົມ ແລະ ແຫຼ່ງທຶນອື່ນທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ.

### ມາດຕາ 71 (ປັບປຸງ) ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ນັບແຕ່ຂັ້ນສູນກາງ ລົງຮອດ ທ້ອງຖິ່ນ ມີເຄື່ອງໝາຍ, ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ແລະ ມີເຄື່ອງແບບໃນເວລາເກັບກຳຂໍ້ມູນຢູ່ພາກສະໜາມ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 72 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິຄົບຖ້ວນ, ຊັດເຈນ ແລະ ທັນຕາມກຳນົດເວລາ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 73 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມຕ່າງໆ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 74 (ໃໝ່) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ກໍ່ຄວາມເສຍຫາຍ ບໍ່ຫຼວງຫຼາຍ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 75 (ໃໝ່) ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 76 (ໃໝ່) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຜ່ານການກ່າວເຕືອນ ແລະ ສຶກສາອົບຮົມແລ້ວ ແຕ່ຍັງສືບຕໍ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍ ຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 77 (ໃໝ່) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຈະຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 78 (ໃໝ່) ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ເປັນການກະທຳຜິດທາງອາຍາ ຈະຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 79 (ໃໝ່) ວັນສະຖິຕິແຫ່ງຊາດ**

ວັນສະຖິຕິແຫ່ງຊາດ ແມ່ນ ວັນທີ 30 ມິຖຸນາ 2010.

**ມາດຕາ 80 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 81 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສະຖິຕິ ສະບັບເລກທີ 03/ສພຊ, ລົງວັນທີ 30 ມິຖຸນາ 2010.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ



ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ ເລກ 033/ປປທ

ນະຄອນຫຼວງວຽງຈັນ, ວັນທີ 15 ມັງກອນ 2020

# ລັດຖະດຳລັດ

# ຂອງປະທານປະເທດ

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 35/ສພຊ, ລົງວັນທີ 04 ທັນວາ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັງປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 37/ຄປຈ, ລົງວັນທີ 18 ທັນວາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປັງປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 35/ສພຊ

ນະຄອນຫຼວງວຽງຈັນ, ວັນທີ 04 / 12 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າ ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016 ຄັ້ງວັນທີ 4 ທັນວາ 2019.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 80/ສພຊ

ນະຄອນຫຼວງວຽງຈັນ, ວັນທີ 4 ທັນວາ 2019

# ກົດໝາຍວ່າດ້ວຍ ການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2016

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ແນໃສ່ສ້າງເງື່ອນໄຂ ແລະ ກົນໄກສະດວກໃຫ້ແກ່ການຊຸກຍູ້, ສົ່ງເສີມການລົງທຶນ ດັ່ງນີ້:

**ມາດຕາ 12 ນະໂຍບາຍສົ່ງເສີມດ້ານພາສີ ແລະ ອາກອນ**

ຜູ້ທີ່ລົງທຶນ ຢູ່ ສປປ ລາວ ນອກຈາກໄດ້ຮັບນະໂຍບາຍສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ ແລະ ມາຕາ 11 ນະໂຍບາຍດ້ານອາກອນກຳໄລໃນກິດຈະການ ຕາມຂະແໜງການ ແລະ ເຂດ ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ມາດຕາ 12 ກິດຈະການທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມແລ້ວ ຍັງຈະໄດ້ຮັບນະໂຍບາຍຕ້ານພາສີ ແລະ ອາກອນ ດັ່ງນີ້:

1. ການນຳເຂົ້າ ວັດຖູປະກອນທີ່ບໍ່ສາມາດ ສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອເປັນຊັບສົມບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນ ພາສີ ແລະ ອາກອນມູນຄ່າເພີ່ມ; ສ່ວນການນຳເຂົ້າ ນ້ຳມັນເຊື້ອໄຟ, ອາຍແກັສ, ນ້ຳມັນຫຼໍ່ລື່ນ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖູປະກອນອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ;

ສຳລັບການນຳເຂົ້າຊົ່ວຄາວ ພາຫະນະກົນຈັກ ຕ້ອງໄດ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ,

2. ການນຳເຂົ້າ ວັດຖຸດິບ, ແຮ່ທາດ, ວັດຖູປະກອນ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ ຈະໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ໃນກໍລະນີສິນຄ້າດັ່ງກ່າວບໍ່ສົ່ງອອກ

ໃຫ້ ເກັບພາສີ, ອາກອນ ຕາມກົດໝາຍທີ່ກ່ຽວຂ້ອງກຳນົດ;

3. ການນຳໃຊ້ ວັດຖຸດິບ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ຢູ່ພາຍໃນ ທີ່ຮັບໃຊ້ການຜະລິດ ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ຖືກຍົກເວັ້ນອາກອນມູນຄ່າເພີ່ມ.

ສຳລັບການສົ່ງອອກ ວັດຖຸດິບ ແລະ ຜະລິດຕະພັນ ຈາກແຮ່ທາດ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ລັດຖະບານ ເປັນຜູ້ກຳນົດ ບັນຊີລາຍການຜະລິດຕະພັນເຄິ່ງສຳເລັດຮູບ ເພື່ອສົ່ງອອກ.

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ແລະ ປ່ຽນແທນ ມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 .

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 135 /ນຍ.

# ດຳລັດ

# ວ່າດ້ວຍ ການສ້າງ ແລະ

# ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ

*****************

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມ ການສະເໜີ ຂອງປະທານຄະນະກຳມະການແຜນການ ແລະ ການຮ່ວມມື.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ວ່າດ້ວຍຫຼັກການທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ມີຈຸດປະສົງກຳນົດຫຼັກການ ແລະ ວິທີການກ່ຽວກັບການສ້າງ, ການຄຸ້ມຄອງ, ການຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ( ຕໍ່ໄປເອີ້ນວ່າ "ແຜນພັດທະນາ" ) ໃຫ້ເປັນລະບົບທີ່ເອກະພາບ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ຄວາມໝາຍສຳຄັນ ຂອງແຜນພັດທະນາ

ແຜນພັດທະນາ ແມ່ນເຄື່ອງມືຕົ້ນຕໍ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ ຂອງພັກ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ ຂອງລັດ ດ້ວຍການກຳນົດອອກເປັນນະໂຍບາຍ, ມາດຕະການ, ເປັນແຜນງານ, ໂຄງການ ແລະ ວຽກງານ ລະອຽດ ໃນແຕ່ລະໄລຍະ ແນໃສ່ບັນລຸເປົ້າໝາຍສູງສຸດທີ່ ພັກໄດ້ກຳນົດໄວ້ຄື : ກໍ່ສ້າງປະເທດຊາດໃຫ້ຮັ່ງມີ ເຂັ້ມແຂງ, ສັງຄົມສີວິໄລຍຸຕິທຳ, ປະຊາຊົນຮັ່ງມີຜາສຸກ.

**ມາດຕາ 3 ຫຼັກການລວມໃນການສ້າງ ແລະ ຄຸ້ມຄອງແຜນພັດທະນາ**

3.1 ໃນການເຄື່ອນໄຫວເພື່ອພັດທະນາ ແລະ ຄຸ້ມຄອງເສດຖະກິດ-ສັງຄົມ ຂອງທົ່ວຂະແໜງການ ແລະ ທ້ອງຖິ່ນຕ້ອງດຳເນີນ ໄປຕາມແຜນພັດທະນາຂອງຕົນ ທີ່ໄດ້ກຳນົດໄວ້ ແລະ ຮັບຮອງເອົາໂດຍສະພາແຫ່ງຊາດໃນແຕ່ລະໄລຍະ; ຖືເອົາແຜນພັດທະນາເປັນທິດຊີ້ນຳ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ຢ່າງມີປະສິດທິພາບ.

3.2 ແຜນພັດທະນາທີ່ຂະແໜງການ ແລະ ທ້ອງຖິ່ນສ້າງຂຶ້ນນັ້ນ ຕ້ອງສ່ອງແສງໃຫ້ເຫັນເຖິງການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງຍຸດທະສາດ, ເປົ້າໝາຍບຸລິມະສິດ ທີ່ພັກ ແລະ ລັດໄດ້ກຳນົດໄວ້ໃນແຕ່ລະໄລຍະ, ຮັບປະກັນການດຸ່ນດ່ຽງ ແລະ ສົມສ່ວນ ລະຫ່ວາງການເຕີບໂຕດ້ານເສດຖະກິດກັບການພັດທະນາດ້ານສັງຄົມ, ການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ການປົກປັກຮັກສາສິ່ງແວດລ້ອມ.

3.3 ການສ້າງ ແລະ ຄຸ້ມຄອງແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ຕ້ອງຮັບປະກັນການປະສານສົມທົບ ຢ່າງກົມກຽວທຸກພາກສ່ວນທີ່ກ່ຽວຂ້ອງ ໂດຍປະຕິບັດຕາມ ຫຼັກການເລີ່ມມາແຕ່ຮາກຖານ ແລະ ມີສ່ວນຮ່ວມຂອງປະຊາຊົນ.

**ມາດຕາ 4 ແຜນພັດທະນາ ແບ່ງອອກເປັນປະເພດຕ່າງໆ ດັ່ງນີ້ :**

**4.1 ແຜນພັດທະນາໄລຍະຍາວ** ແມ່ນແຜນພັດທະນາທີ່ມີລັກສະນະສັງລວມທິດທາງ, ໜ້າທີ່ ແລະ ເປົ້າໝາຍຍຸດທະສາດ ໄລຍະ 10 ປີຂຶ້ນໄປ ຫຼື ເອີ້ນວ່າ ຍຸດທະສາດການພັດທະນາ.

**ແຜນພັດທະນາໄລຍະກາງ** ແມ່ນແຜນພັດທະນາ ຊຶ່ງມີໄລຍະການປະຕິບັດຕໍ່າກວ່າ 10 ປີ ລົງມາ ເຊັ່ນ : ແຜນແມ່ບົດການພັດທະນາ, ແຜນພັດທະນາ ໄລຍະ 5 ປີ.

**ແຜນພັດທະນາໄລຍະສັ້ນ** ແມ່ນແຜນພັດທະນາທີ່ຜັນຂະຫຍາຍລະອຽດ ທິດທາງ, ໜ້າທີ່ແຜນພັດທະນາໄລຍະກາງ ຫຼື ເອີ້ນວ່າ ແຜນພັດທະນາ ປະຈຳປີ.

4.2 ແຜນພັດທະນາ ແບ່ງຕາມເນື້ອໃນ ແລະ ຂົງເຂດການຄຸ້ມຄອງ ປະກອບມີ :

- ແຜນພັດທະນາແຫ່ງຊາດ;
- ແຜນພັດທະນາຂອງຂະແໜງການ ແລະ ອົງການຂັ້ນສູນກາງ;
- ແຜນພັດທະນາເຂດແຄ້ວນ ຫຼື ບໍລິເວນເສດຖະກິດຂອງປະເທດ;
- ແຜນພັດທະນາຂອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ( ຕໍ່ໄປເອີ້ນວ່າ ແຜນພັດທະນາຂອງແຂວງ );
- ແຜນພັດທະນາຂອງເມືອງ;
- ແຜນພັດທະນາຂອງເທດສະບານ;
- ແຜນພັດທະນາຂອງບ້ານ ຫຼື ກຸ່ມບ້ານ;

## ໝວດທີ II

### ວ່າດ້ວຍການສ້າງ, ພິຈາລະນາ ແລະ ຮັບຮອງແຜນພັດທະນາ

**ມາດຕາ 5 ຂະໜວນການສ້າງ, ອົງການທີ່ມີສິດອຳນາດ ໃນການສ້າງ ແລະ ຄຸ້ມຄອງແຜນພັດທະນາ**

5.1 ສະພາແຫ່ງຊາດເປັນອົງການສູງສຸດ ໃນການພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາແຫ່ງຊາດ ແລະ ບົດລາຍງານການຈັດຕັ້ງປະຕິບັດ ແຜນພັດທະນາແຫ່ງຊາດແຕ່ລະໄລຍະ;

5.2 ລັດຖະບານເປັນອົງການພິຈາລະນາ, ອະນຸມັດຮ່າງແຜນພັດທະນາແຫ່ງຊາດ ໃນແຕ່ລະໄລຍະ ເພື່ອນຳສະເໜີສະພາແຫ່ງຊາດພິຈາລະນາ;

5.3 ຄະນະກຳມະການແຜນການ ແລະ ການຮ່ວມມື ເປັນຜູ້ຄົ້ນຄ້ວາສ້າງ ແລະ ສັງລວມແຜນພັດທະນາແຫ່ງຊາດ ບົນພື້ນຖານຮ່າງແຜນພັດທະນາ ຂອງຂະແໜງການ ແລະ ທ້ອງຖິ່ນສະເໜີມາ; ພ້ອມກັນນັ້ນ ກໍເປັນອົງການໃຈກາງໃນການປະສານງານ ແລະ ຄຸ້ມຄອງແຜນພັດທະນາແຫ່ງຊາດ;

5.4 ກະຊວງ, ອົງການທຽບເທົ່າ ເປັນຜູ້ສ້າງ ສັງລວມ ແລະ ຄຸ້ມຄອງແຜນພັດທະນາໃນທົ່ວຂະແໜງການ ທີ່ຕົນຮັບຜິດຊອບ;

5.5 ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເປັນຜູ້ສ້າງ, ສັງລວມ ແລະ ຄຸ້ມຄອງແຜນພັດທະນາຂອງທ້ອງຖິ່ນ ທີ່ຕົນຮັບຜິດຊອບ;

5.6 ອຳນາດການປົກຄອງຂັ້ນເມືອງ ເປັນຜູ້ສ້າງ ແລະ ຄຸ້ມຄອງແຜນພັດທະນາໃນຂອບເຂດເມືອງຂອງຕົນ;

5.7 ອຳນາດການປົກຄອງເທດສະບານ ເປັນຜູ້ສ້າງ ແລະ ຄຸ້ມຄອງແຜນພັດທະນາເທດສະບານຂອງຕົນ;

5.8 ອຳນາດການປົກຄອງຂັ້ນບ້ານ ສ້າງແຜນພັດທະນາບ້ານຂອງຕົນ.

**ມາດຕາ 6 ລະບຽບການສ້າງ, ພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາ**

6.1 ຄະນະກຳມະການແຜນການ ແລະ ການຮ່ວມມື ອອກແຈ້ງການ ແນະນຳກ່ຽວກັບທິດທາງ, ຄາດໝາຍ ແລະ ວິທີການສ້າງແຜນພັດທະນາແຕ່ລະໄລຍະ ເຖິງບັນດາກະຊວງ, ອົງການທຽບເທົ່າ, ບັນດາແຂວງ, ກຳແພງນະຄອນ ແລະ ເຂດພິເສດ;

6.2 ບົນພື້ນຖານ ແຈ້ງການ ຂອງຄະນະກຳມະການແຜນການ ແລະ ການຮ່ວມມື, ໂດຍມີການເຂົ້າຮ່ວມຢ່າງກວ້າງຂວາງ ຈາກທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນ, ບັນດາຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າສ້າງຮ່າງແຜນພັດທະນາຂອງຕົນ ໂດຍອີງໃສ່ ຈຸດພິເສດ, ທ່າແຮງ, ຄວາມສາມາດ ແລະ ແຫຼ່ງຊັບພະຍາກອນຕ່າງໆຂອງຕົນ ສະເໜີ ຕໍ່ກອງປະຊຸມໃນຂັ້ນຂອງຕົນ ເພື່ອພິຈາລະນາຜ່ານ ແລ້ວສະເໜີຕໍ່ ຄະນະກຳມະການແຜນການ ແລະ ການ

ຮ່ວມມື;

6.3 ບົນພື້ນຖານຮ່າງແຜນພັດທະນາ ທີ່ຂະແໜງການ ແລະ ທ້ອງຖິ່ນສະເໜີມາ, ຄະນະກຳມະການແຜນການ ແລະ ການຮ່ວມມື ສັງລວມເປັນແຜນພັດທະນາແຫ່ງຊາດ ແລ້ວນຳສະເໜີຕໍ່ກອງປະຊຸມຮ່ວມ ລະຫວ່າງຂະແໜງການ ແລະ ທ້ອງຖິ່ນ;

6.4 ກອງປະຊຸມສະໄໝສາມັນຂອງລັດຖະບານ ພິຈາລະນາ ອະນຸມັດຜ່ານຮ່າງແຜນພັດທະນາຂອງປະເທດ ແລ້ວນຳສະເໜີຕໍ່ກອງປະຊຸມ ຄະນະບໍລິຫານງານສູນກາງພັກ ເພື່ອໃຫ້ທິດຊີ້ນຳ ແລ້ວສະເໜີ ຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງເອົາ;

6.5 ປະຊາຊົນ ແລະ ທຸກພາກສ່ວນເສດຖະກິດ ມີການປະກອບສ່ວນໃນການສ້າງ ແລະ ປະຕິບັດແຜນການ.

**ມາດຕາ 7 ວິທີການລວມໃນການສ້າງແຜນພັດທະນາ**

ເພື່ອຮັບປະກັນໃຫ້ແຜນພັດທະນາ ທີ່ສ້າງຂຶ້ນຖືກທິດທາງ, ມີລັກສະນະວິທະຍາສາດ ແລະ ແທດຕົວຈິງການສ້າງແຜນການຕ້ອງປະຕິບັດ ຕາມວິທີການລວມ ດັ່ງນີ້ :

7.1 ເກັບກຳຂໍ້ມູນ ກ່ຽວກັບ ສະພາບການພັດທະນາເສດຖະກິດ-ສັງຄົມໄລຍະຜ່ານມາ ໃຫ້ຄົບຖ້ວນ;

7.2 ວິໄຈ ແລະ ຕີລາຄາສະພາບການ ໂດຍຈຳແນກຈະແຈ້ງ ດ້ານດີ, ອ່ອນ, ສາຍເຫດ, ກາລະໂອກາດ ແລະ ສິ່ງທ້າທາຍ;

7.3 ການກຳນົດທິດທາງ, ໜ້າທີ່, ເປົ້າໝາຍ ແລະ ໂຄງການບຸລິມະສິດ ໂດຍອີງໃສ່ຄວາມອາດສາມາດຂອງແຫຼ່ງຊັບພະຍາກອນທີ່ມີຕົວຈິງ ເປັນຕົ້ນ: ທຶນ, ແຮງງານ ແລະ ວັດຖຸ ອື່ນໆ ບົນພື້ນຖານ ຂອງກຳນົດໝາຍເສດຖະກິດ, ເຕັກນິກທີ່ກຳນົດອອກ ຢ່າງເປັນທາງການ;

7.4 ກຳນົດນະໂຍບາຍ, ມາດຕະການ ແລະ ວິທີຈັດຕັ້ງລະອຽດ ໃຫ້ແທດເໝາະກັບສະພາບການຕົວຈິງ ແລະ ຄ່ອງຕົວ ບົນພື້ນຖານການນຳໃຊ້ກົນໄກຕະຫຼາດທີ່ສອດຄ່ອງ, ລະດົມໄດ້ທ່າແຮງ ແລະ ຈຸດແຂງຂອງປະເທດ ກໍຄືຂອງຂະແໜງການ ແລະ ທ້ອງຖິ່ນຢ່າງມີປະສິດທິຜົນ;

7.5 ຕິດຕາມກວດກາ, ຕີລາຄາ ແລະ ປະເມີນຜົນຢ່າງພາວະວິໄສ ໃນການປະຕິບັດຕົວຈິງ ເພື່ອສົມທຽບກັບເປົ້າໝາຍທີ່ວາງອອກ, ຖອດຖອນບົດຮຽນ ແລະ ປັບປຸງແກ້ໄຂຂໍ້ຂາດຕົກບົກຜ່ອງ ແລ້ວລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ III

## ວ່າດ້ວຍ ການຈັດຕັ້ງປະຕິບັດ, ສະຫຼຸບລາຍງານ ແລະ ຕີລາຄາປະເມີນຜົນ

**ມາດຕາ 8 ການປະກາດໃຊ້ແຜນພັດທະນາ.**

ພາຍຫຼັງສະພາແຫ່ງຊາດ ໄດ້ພິຈາລະນາ ແລະ ຮັບຮອງ ເອົາແຜນພັດທະນາແຫ່ງຊາດແລ້ວ, ນາຍົກລັດຖະມົນຕີ ອອກດຳລັດປະກາດໃຊ້ແຜນພັດທະນາດັ່ງກ່າວ.

**ມາດຕາ 9 ການແນະນຳປະຕິບັດແຜນພັດທະນາ.**

ຄະນະກຳມະການແຜນການ ແລະ ການຮ່ວມມື ອອກແຈ້ງການ ແນະນຳການປະຕິບັດແຜນພັດທະນາໂດຍລະອຽດ ພ້ອມທັງແຈ້ງບັນດາຕົວເລກຄາດໝາຍ, ບັນດາໂຄງການລົງທຶນຂອງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງແລ້ວນັ້ນ ໃຫ້ແກ່ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ກຳແພງນະຄອນ ແລະ ເຂດພິເສດຊາບ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ທັນເວລາ.

**ມາດຕາ 10 ການຈັດຕັ້ງປະຕິບັດແຜນພັດທະນາ.**

10.1 ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕ້ອງແຈ້ງຕົວເລກຄາດໝາຍ ແລະ ໂຄງການລົງທຶນຂອງຂະແໜງການ ແລະ ທ້ອງຖິ່ນ, ພ້ອມທັງແບ່ງງານ ແລະ ທຶນຮອນລະອຽດໃຫ້ກົມ, ກອງ, ສະຖາບັນ, ພະແນກການອ້ອມຂ້າງ ແລະ ເມືອງ ທີ່ຂຶ້ນກັບຕົນ ເພື່ອຈັດຕັ້ງປະຕິບັດ ຕາມແຜນພັດທະນາ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາຢ່າງເຂັ້ມງວດ, ເມືອງຕ້ອງເຜີຍແຜ່ແຈ້ງຕົວເລກຄາດໝາຍ, ທຶນ ແລະ ໂຄງການລົງທຶນຂອງຕົນທີ່ໄດ້ຮັບແບ່ງປັນຈາກ ແຂວງ ໃຫ້ຫ້ອງການອ້ອມຂ້າງ ແລະ ບ້ານທີ່ຂຶ້ນກັບຕົນ ນຳໄປຈັດຕັ້ງປະຕິບັດ.

10.2 ອຳນາດການປົກຄອງທຸກຂັ້ນ ແລະ ທຸກອົງການຮັບຜິດຊອບວຽກງານ ແຜນພັດທະນາ ຕ້ອງປຸກລະດົມ ຂົນຂວາຍ, ໂຄສະນາ ເຜີຍແຜ່ທິດທາງ, ໜ້າທີ່, ເປົ້າໝາຍຂອງແຜນການ ໃຫ້ທຸກອົງກອນ ທັງພາກລັດ ແລະ ເອກະຊົນ, ປະຊາຊົນທຸກຊັ້ນຄົນ ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ແຜນພັດທະນາຢ່າງກວ້າງຂວາງ.

**ມາດຕາ 11 ການຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາ**

11:1 ຄະນະກຳມະການແຜນການ ແລະ ການຮ່ວມມື ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາຢູ່ບັນດາຂະແໜງການ ແລະ ທ້ອງຖິ່ນ ເປັນແຕ່ລະງວດ ຂອງ ສົກປີງົບປະມານ.

11.2 ບັນດາກະຊວງ, ອົງການທຽບເທົ່າ, ບັນດາແຂວງ, ຂະແໜງການອ້ອມຂ້າງແຂວງ ລົງຕິດຕາມ, ຊຸກຍູ້ການປະຕິບັດແຜນພັດທະນາຕາມສາຍຕັ້ງຂອງຕົນ ເປັນແຕ່ລະງວດຂອງສົກປີງົບປະມານ.

11.3 ຫ້ອງການແຜນການເມືອງ ແລະ ຂະແໜງການອ້ອມຂ້າງເມືອງ ລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາ ເປັນ ແຕ່ລະເດືອນ.

**ມາດຕາ 12 ການສະຫຼຸບລາຍງານ**

12.1 ບົດຕີລາຄາຄາດຄະເນ ການຈັດຕັ້ງປະຕິບັດແຜນການ

ຫ້ອງການແຜນການເມືອງ ໂດຍສົມທົບກັບຂະແໜງການອ້ອມຂ້າງເມືອງ ຕີລາຄາ ຂໍ້ມູນ ແລະ ສະພາບການທີ່ພົ້ນເດັ່ນ ຂອງການປະຕິບັດແຜນພັດທະນາແຕ່ລະງວດ ແລ້ວສົ່ງໃຫ້ພະແນກແຜນການ ແລະ ການຮ່ວມມືແຂວງ, ພະແນກແຜນການ ແລະ ການຮ່ວມມືແຂວງ ຕີລາຄາ ສັງລວມ ສະພາບການປະຕິບັດແຜນພັດທະນາຂອງເມືອງ; ພະແນກການອ້ອມຂ້າງແຂວງ ຕີລາຄາຜົນການຈັດຕັ້ງປະຕິບັດ ແຜນການ ແລ້ວສ້າງເປັນບົດລາຍງານສົ່ງໃຫ້ຄະນະກຳມະການແຜນການ ແລະ ການຮ່ວມມື, ບັນດາກະຊວງ, ອົງການທຽບເທົ່າກໍຕີລາຄາ ແລະ ສັງລວມສະພາບການຈັດຕັ້ງປະຕິບັດແຜນການ ປະຈຳງວດຂອງຕົນ ສົ່ງໃຫ້ ຄະນະກຳມະການແຜນການ ແລະ ການຮ່ວມມື ໃນວັນທີ 20 ຂອງເດືອນສຸດທ້າຍໃນແຕ່ລະງວດ ເພື່ອສັງລວມ ແລະ ລາຍງານລັດຖະບານ.

12.2 ບົດລາຍງານສົມບູນ

ຂັ້ນຕອນ ການເຮັດບົດລາຍງານ ສະບັບສົມບູນຂອງແຕ່ລະງວດ ແມ່ນເຮັດແບບດຽວກັນກັບການເຮັດບົດລາຍງານຄາດຄະເນ ແຕ່ເນື້ອໃນຂອງບົດລາຍງານ ແມ່ນ ໃຫ້ຄົບຖ້ວນ ແລະ ມີຂໍ້ມູນການປະຕິບັດແຜນການງວດຂາດຕົວ. ບົດລາຍງານດັ່ງກ່າວ ຕ້ອງສົ່ງເຖິງຄະນະກຳມະການແຜນການ ແລະ ການຮ່ວມມື ໃນວັນທີ 20 ຂອງເດືອນທຳອິດ ງວດຕໍ່ໄປ.

**ມາດຕາ 13** ບົນພື້ນຖານການລາຍງານຂອງຂະແໜງການ ແລະ ທ້ອງຖິ່ນ ຄະນະກຳມະການແຜນການ ແລະ ການຮ່ວມມື ໂດຍແມ່ນສູນສະຖິຕິແຫ່ງຊາດ ສົມທົບກັບກົມແຜນການສັງລວມ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາທົ່ວປະເທດ ປະຈຳງວດ, ປະຈຳ 6 ເດືອນ ແລະ ປະຈຳປີ ຕາມສົກປີງົບປະມານ; ສ້າງເປັນບົດລາຍງານສະຖິຕິສະບັບສົມບູນ ສະເໜີລັດຖະບານເປັນແຕ່ລະງວດ. ສຳລັບການລາຍງານສະຖິຕິ ຂອງປີຜ່ານມາ ແມ່ນໃຫ້ສຳເລັດ ກ່ອນວັນທີ 1 ມີນາ ຂອງປີຕໍ່ໄປ.

**ມາດຕາ 14 ການຕີລາຄາ ປະເມີນຜົນການປະຕິບັດແຜນພັດທະນາ.**

ການຕີລາຄາປະເມີນຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາແຫ່ງຊາດ ແຕ່ລະປີ, 5 ປີຕ້ອງໄດ້ດຳເນີນໄປພ້ອມໆ ກັບການສ້າງບົດລາຍງານ ສະຖິຕິແຕ່ລະໄລຍະ .

## ໝວດທີ IV
## ວ່າດ້ວຍການປະຕິບັດວິໃນ ແລະ ຍ້ອງຍໍຊົມເຊີຍ ຕໍ່ຜູ້ປະຕິບັດ ແຜນການ

**ມາດຕາ 15 ວ່າດ້ວຍວິໃນຂອງແຜນການພັດທະນາ**

ແຜນພັດທະນາທີ່ໄດ້ຜ່ານການຮັບຮອງເອົາໂດຍສະພາແຫ່ງຊາດ ແລ້ວ ຖືວ່າເປັນເອກະສານທີ່ມີຜົນສັກສິດທາງດ້ານນິຕິກຳ. ທຸກຂະແໜງການ ແລະ ທ້ອງຖິ່ນ ລ້ວນແຕ່ຕ້ອງຖືເອົາແຜນການເປັນເຄື່ອງມືຊີ້ນຳການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 16** ສຳລັບແຜນການລົງທຶນຂອງລັດທີ່ສະພາແຫ່ງຊາດໄດ້ຮັບຮອງເອົາຕາມການຈັດແບ່ງທຶນໃຫ້ແຕ່ລະໂຄງການ ຂອງຂະແໜງການ ແລະ ທ້ອງຖິ່ນນັ້ນເປັນຄາດໝາຍກົດຄຳສັ່ງ ດັ່ງນັ້ນ, ທຸກຂະແໜງການ ແລະ ທ້ອງຖິ່ນ ຕ້ອງປະຕິບັດຕາມແຜນງົບປະມານການລົງທຶນ ທີ່ໄດ້ຮັບຮອງເອົາຈາກ ສະພາແຫ່ງຊາດຢ່າງເຂັ້ມງວດ; ເດັດຂາດບໍ່ໃຫ້ປະຕິບັດນອກແຜນ ທີ່ສະພາແຫ່ງຊາດໄດ້ຮັບຮອງ, ຖ້າຂະແໜງການ ຫຼື ທ້ອງຖິ່ນໃດ ຝ່າຝືນຕ້ອງໄດ້ຮັບການປະຕິບັດວິໄນ ຕາມແຕ່ລະສະຖານໜັກ ຫຼື ເບົາ.

**ມາດຕາ 17** ເພື່ອໃຫ້ແຜນການໄດ້ຖືກພິຈາລະນາ ແລະ ຈັດຕັ້ງປະຕິບັດທັນກຳນົດເວລາ ທີ່ລັດຖະບານ ວາງອອກ ບັນດາຂະແໜງການ ແລະ ທ້ອງຖິ່ນຕ້ອງປະຕິບັດການສ້າງ ແລະ ສະຫຼຸບລາຍງານແຜນການຕາມຄຳສັ່ງຂອງນາຍົກລັດຖະມົນຕີ ແລະ ແຈ້ງການ ຂອງຄະນະກຳມະການແຜນການ ແລະ ການຮ່ວມມື ທັນຕາມກຳນົດເວລາຢ່າງເຂັ້ມງວດ, ຂະແໜງການ ແລະ ທ້ອງຖິ່ນໃດຫາກປະຕິບັດຊັກຊ້າແກ່ຍາວ ຈະຕ້ອງຖືກຕຳນິວິຈານ ຫຼື ປະຕິບັດວິໄນ ທາງດ້ານບໍລິຫານຢ່າງເຂັ້ມງວດ.

**ມາດຕາ 18** ຂະແໜງການ ແລະ ທ້ອງຖິ່ນຫາກປະຕິບັດເຂັ້ມງວດຕາມ ວິໄນຂອງແຜນການ, ມີຫົວຄິດ ປະດິດສ້າງຈັດຕັ້ງປະຕິບັດ ແຜນການ ແລະ ໂຄງການລົງທຶນຂອງລັດໄດ້ດີ ແລະ ມີປະສິດທິຜົນສູງຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ບຳເນັດຈາກລັດຖະບານຢ່າງເໝາະສົມ.

## ໝວດທີ V
## ວ່າດ້ວຍບົດບັນຍັດສຸດທ້າຍ

**ມາດຕາ 19** ການສ້າງແຜນພັດທະນາ ທຸກຄັ້ງ ຕ້ອງປະຕິບັດຕາມ ດຳລັດສະບັບນີ້ ແລະ ປະຕິບັດຕາມລະບຽບຫຼັກການອື່ນໆ ທີ່ທາງການປະກາດໃຊ້.

**ມາດຕາ 20** ມອບໃຫ້ ປະທານຄະນະກຳມະການແຜນການ ແລະ ການຮ່ວມມື ອອກຂໍ້ກຳນົດ, ບົດແນະນຳ ວິທີການ ແລະ ມາດຕະການລະອຽດ ເພື່ອຈັດຕັ້ງປະຕິບັດ ດຳລັດສະບັບນີ້ ແລະ ມີໜ້າທີ່ ຕິດຕາມ ກວດກາການຈັດຕັ້ງປະຕິບັດຕົວຈິງ ຕາມພາລະບົດບາດຂອງຕົນ.

**ມາດຕາ 21** ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ເນື້ອໃນ, ຂໍ້ຄວາມໃດ ຂອງດຳລັດ, ຂໍ້ກຳນົດ, ກົດລະບຽບ ກ່ຽວກັບ ວຽກງານແຜນການ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກ ບໍ່ສອດຄ່ອງກັບດຳລັດສະບັບນີ້ ໃຫ້ປະຕິບັດຕາມເນື້ອໃນດຳລັດສະບັບນີ້ ປ່ຽນແທນ.

ວຽງຈັນ, ວັນທີ 7 - 08 - 2002

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**



ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ ເລກທີ 177 /ນຍ

ນະຄອນວຽງຈັນ, ວັນທີ 13 / 11 / 2013

# ດຳລັດ

## ວ່າດ້ວຍ ລະບຽບການຄຸ້ມຄອງ ແລະ ນະໂຍບາຍສົ່ງເສີມການລົງທຶນ ຂອງ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ສະບັບເລກທີ 148/ນຍ, ລົງວັນທີ 29 ກັນຍາ 2003.
- ອີງຕາມ ການສະເໜີຂອງ ຄະນະກຳມະການແຜນການ ແລະ ການຮ່ວມມື ສະບັບເລກທີ 1404/ຄຜຮ, ລົງວັນທີ 13 ສິງຫາ 2003.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I
## ວ່າດ້ວຍ ບົດບັນຍັດທົ່ວໄປ

### ມາດຕາ1 ໜ້າທີ່ຂອງດຳລັດ

ດຳລັດສະບັບນີ້ ວາງອອກເພື່ອກຳນົດລະບຽບການ ແລະ ນະໂຍບາຍພິເສດຕ່າງໆ ກ່ຽວກັບການວາງແຜນ, ຄຸ້ມຄອງ ແລະ ສົ່ງເສີມການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ຢູ່ພາຍໃນເຂດເສດຖະກິດພິເສດ ສະຫວັນ-ເຊໂນ ແຂວງສະຫວັນນະເຂດ, ເພື່ອແນໃສ່ດຶງດູດ ແລະ ສົ່ງເສີມການລົງທຶນ ດ້ານການຜະລິດ, ການສົ່ງອອກ, ການຄ້າ, ການທ່ອງທ່ຽວ, ການບໍລິການ, ລະບົບສາງ ແລະ ການຂົນສົ່ງຜ່ານແດນ.

### ມາດຕາ 2 ເຂດເສດຖະກິດພິເສດ ສະຫວັນ-ເຊໂນ

ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ແຂວງສະຫວັນນະເຂດ (ຕໍ່ໄປນີ້ເອີ້ນວ່າ “ຂສສຊ”) ແມ່ນ

ພື້ນທີ່ດິນ ທີ່ລັດຈັດສັນສຳລັບສົ່ງເສີມການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ໃນຂະແໜງການຜະລິດ, ການຄ້າ ແລະ ການບໍລິການ ຕາມກົນໄກເສດຖະກິດຕະຫຼາດ ບົນພື້ນຖານການຄຸ້ມຄອງ ດ້ວຍລະບຽບກົດໝາຍສະເພາະ ແລະ ການປະຕິບັດນະໂຍບາຍສົ່ງເສີມການລົງທຶນ ທີ່ມີນະໂຍບາຍພິເສດ ໃຫ້ແກ່ທຸລະກິດ ທີ່ຖືກອະນຸຍາດໃຫ້ລົງທຶນ ແລະ ດຳເນີນກິດຈະການໄດ້ ຢູ່ພາຍໃນ **ຂສສຊ.**

**ມາດຕາ 3 ຂອບເຂດທີ່ດິນຂອງ ຂສສຊ**

**ຂສສຊ** ມີຂອບເຂດເນື້ອທີ່ເບື້ອງຕົ້ນ ປະມານ 305 ເຮັກຕາ (ຢູ່ຈຸດ A) ທີ່ເມືອງຄັນທະບູລີ ແລະ ປະມານ 20 ເຮັກຕາ (ຢູ່ຈຸດ B) ທີ່ ເມືອງອຸທຸມພອນ ແຂວງສະຫວັນນະເຂດ ຕາມແຜນທີ່ (ຮູບ 6.5) ຂອງບົດລາຍງານການສຶກສາ ກ່ຽວກັບການພັດທະນາເຂດເສດຖະກິດພິເສດ ໃນບໍລິເວນຊາຍແດນຂອງ ສປປ ລາວ (ແຂວງສະຫວັນນະເຂດ) (ບົດລາຍງານສຸດທ້າຍ ສະບັບເດືອນ ກຸມພາ ປີ 2001).

**ມາດຕາ 4 ຈຸດປະສົງຂອງການສ້າງຕັ້ງ ຂສສຊ**

ການສ້າງຕັ້ງ ຂສສຊ ມີຈຸດປະສົງຄື:

1. ເພື່ອສ້າງເງື່ອນໄຂ ແລະ ທ່າແໜງແຫ່ງການຫັນເປັນອຸດສາຫະກຳ ແລະ ຄວາມທັນສະໄໝເທື່ອລະກ້າວ ໂດຍນຳໃຊ້ທ່າແຮງດ້ານທີ່ຕັ້ງ, ການເປັນທາງຜ່ານ ໃນອະນຸພາກພື້ນ ແນໃສ່ຂະຫຍາຍເສດຖະກິດຕະຫຼາດ ຂອງ ສປປ ລາວ ໃຫ້ເຊື່ອມຕົວເຂົ້າກັບເສດຖະກິດຂອງພາກພື້ນ ແລະ ຂອງໂລກ ເພື່ອພັດທະນາພື້ນຖານເສດຖະກິດຂອງຊາດ ໃຫ້ຂະຫຍາຍຕົວໄວ ເປັນພື້ນຖານໃຫ້ແກ່ ການຍົກສູງລະດັບຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນລາວບັນດາເຜົ່າ ໃຫ້ດີຂຶ້ນເລື້ອຍໆ;

2. ນຳໃຊ້ ແລະ ພັດທະນາເນື້ອທີ່ດິນພາຍໃນ **ຂສສຊ** ເພື່ອບໍລິການ ແລະ ຈັດສັນສິ່ງອຳນວຍຄວາມສະດວກໃນການດຳເນີນງານໃຫ້ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ, ເຊັ່ນ ການຈັດສັນທີ່ດິນ, ການກໍ່ສ້າງລະບົບສະຫາລະນຸປະໂພກ, ເປັນຕົ້ນ ຖະໜົນ, ທໍ່ລະບາຍນ້ຳ, ໂຮງບຳບັດນ້ຳເສຍ, ລະບົບສະໜອງໄຟຟ້າ, ລະບົບນ້ຳປະປາ ແລະ ໂທລະຄົມມະນາຄົມ;

3. ສົ່ງເສີມ ແລະ ດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ລວມທັງຄົນລາວທີ່ຢູ່ຕ່າງປະເທດ ໃຫ້ມາລົງທຶນຢູ່ໃນ **ຂສສຊ;**

4. ປົກປ້ອງ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ໃນ **ຂສສຊ** ໃຫ້ມີການແຂ່ງຂັນ ແລະ ຮ່ວມມືກັນໃນການຂະຫຍາຍການຜະລິດ ແລະ ທຸລະກິດຂອງຕົນ ບົນພື້ນຖານຄວາມສະເໝີພາບກັນ ຕໍ່ໜ້າກົດໝາຍ ;

5. ສົ່ງເສີມນັກລົງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ສາມາດລົງທຶນໄດ້ໃນຂະແໜງການຕ່າງໆ ທີ່ໄດ້ກຳນົດໄວ້ໃນບັນຊີກິດຈະການ ທີ່ຖືກສົ່ງເສີມໃຫ້ລົງທຶນໃນ **ຂສສຊ;**

6. ເພື່ອເປັນແຫຼ່ງສະໜອງວຽກເຮັດງານທຳ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ, ກຳມະກອນໃຫ້ມີຄວາມຮູ້, ຄວາມສາມາດ, ຖອດຖອນບົດຮຽນ ແລະ ປະສົບປະການດ້ານການບໍລິຫານ ແລະ ຄວາມຊຳ

ນານງານລະດັບສູງ;

7. ເພື່ອສ້າງໃຫ້ເປັນສູນກາງໜຶ່ງ ແຫ່ງການຮ່ວມມືດ້ານເສດຖະກິດ, ອຸດສາຫະກຳ, ການຄ້າ, ການເງິນ, ການບໍລິການ ການພັດທະນາດ້ານເຕັກໂນໂລຊີ ທີ່ທັນສະໄໝ ລະຫວ່າງ ສປປ ລາວ ກັບ ຕ່າງປະເທດ;

8. ສ້າງເປັນເຂດໜຶ່ງທີ່ມີຄວາມພິເສດ ທາງດ້ານລະບົບພາສີ ສຳລັບສິນຄ້າ ທີ່ນຳເຂົ້າ-ອອກ ສະເພາະພາຍໃນເນື້ອທີ່ຈຳກັດ ຂອງເຂດນີ້ ແຕ່ໂດຍຖືວ່າເປັນສ່ວນໜຶ່ງ ຂອງລະບົບລັດຖະທຳມະນູນ ແລະ ເປັນສ່ວນໜຶ່ງຂອງພື້ນແຜ່ນດິນອັນຄົບຖ້ວນ ຂອງ ສປປ ລາວ.

**ມາດຕາ 5 ຫຼັກການພື້ນຖານຂອງການເຄື່ອນໄຫວ ຢູ່ໃນ ຂສສຊ**

- ທຸກການເຄື່ອນໄຫວເຂົ້າ-ອອກ ແລະ ພາຍໃນ **ຂສສຊ**, ການສ້າງຕັ້ງ ແລະ ດຳເນີນງານຂອງຫົວໜ່ວຍທຸລະກິດ, ການເຊົ່າທີ່ດິນ ແລະ ນຳໃຊ້ການບໍລິການພາຍໃນ **ຂສສຊ** ຕ້ອງປະຕິບັດຕາມລະບຽບການຄຸ້ມຄອງ ແລະ ນະໂຍບາຍພິເສດ ດ້ານພາສີ, ອາກອນ ແລະ ນະໂຍບາຍການສົ່ງເສີມຕ່າງໆ ທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບນີ້.

- ໃນກໍລະນີທີ່ບັນຫາໃດໜຶ່ງຫາກບໍ່ໄດ້ກຳນົດໄວ້ໃນ ດຳລັດສະບັບນີ້ ແມ່ນໃຫ້ນຳໃຊ້ ຂໍ້ກຳນົດຂອງ ລະບຽບການອື່ນໆ ຂອງ **ຂສສຊ** ແລະ ບົດບັນຍັດຂອງ ກົດໝາຍສະເພາະກ່ຽວກັບ ເຂດເສດຖະກິດພິເສດ ຢູ່ ສປປ ລາວ ແລະ ຖ້າບັນຫານັ້ນຍັງບໍ່ໄດ້ລະບຸໃນເອກະສານນິຕິກຳເຫຼົ່ານັ້ນ ແມ່ນໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ.

**ມາດຕາ 6 ຂົງເຂດເສດຖະກິດພາຍໃນ ຂສສຊ**

ພາຍໃນ **ຂສສຊ** ປະກອບດ້ວຍ ເຂດຈັດສັນສຳລັບພັດທະນາ 3 ຂົງເຂດເສດຖະກິດ ດັ່ງນີ້ :

1. ເຂດອຸດສາຫະກຳ ແລະ ການປຸງແຕ່ງເພື່ອສົ່ງອອກ (Export Processing Zone ຫຼື EPZ)

2. ເຂດການຄ້າປອດພາສີ (Free Trade Zone ຫຼື FTZ)

3. ສູນການບໍລິການ ແລະ ຈັດສົ່ງສິນຄ້າປອດພາສີ (Free Service and Logistic Center ຫຼື FSLC)

**ມາດຕາ 7 ຂະແໜງທຸລະກິດທີ່ຖືກສົ່ງເສີມພາຍໃນ ຂສສຊ**

ທຸລະກິດທີ່ຖືກສົ່ງເສີມ ແລະ ອະນຸຍາດໃຫ້ດຳເນີນກິດຈະການພາຍໃນ **ຂສສຊ** ມີດັ່ງນີ້:

7.1 ທຸລະກິດການຜະລິດ ແລະ ການປຸງແຕ່ງ ເຊັ່ນ: ການຜະລິດສິນຄ້າສຳເລັດຮູບເພື່ອສົ່ງອອກ, ການຜະລິດສິ້ນສ່ວນເອເລັກໂຕຼນິກ, ການປະກອບສິ້ນສ່ວນໃຫ້ເປັນສິນຄ້າສຳເລັດຮູບ, ການປຸງແຕ່ງສິນ

ຄ້ານຳເຂົ້າ ເພື່ອສົ່ງຂາຍຕໍ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ, ການຜະລິດປຸງແຕ່ງກະສິກຳ, ການຜະລິດສິນຄ້າຫັດຖະກຳ, ໂຮງງານຮັບເໝົາ ຫຸ້ມຫໍ່ສິນຄ້າ ແລະ ຜະລິດຕະພັນສຳເລັດຮູບ;

7.2 ທຸລະກິດການຄ້າ ເຊັ່ນ: ຮ້ານຄ້າປອດພາສີ, ການຄ້າຂາຍຍົກຜ່ານແດນປອດພາສີ, ການຂາຍຍົກສິນຄ້າ ແລະ ຜະລິດຕະພັນພາຍໃນ (ເຊັ່ນ: ເຄື່ອງຫັດຖະກຳ, ໄມ້ເນື້ອຫອມ, ແກ້ວປະເສີດ ແລະ ອື່ນໆ), ສູນ ຫຼື ຮ້ານວາງສະແດງສິນຄ້າ, ຮ້ານຊຸບພະສິນຄ້າ ແລະ ຂາຍຍ່ອຍ, ສູນການປະຊຸມ ແລະ ສຳມະນາ (ເພື່ອສົ່ງເສີມວຽກງານການຂາຍຍົກ ແລະ ການສົ່ງອອກ), ການສົ່ງອອກ, ການນຳເຂົ້າ ແລະ ການຄ້າຜ່ານແດນ;

7.3 ທຸລະກິດການບໍລິການ ແລະ ການຈັດສົ່ງ ເຊັ່ນ: ລະບົບສາງເກັບສິນຄ້າທົ່ວໄປ ແລະ ສາງເຢັນ, ການບໍລິການຈັດສົ່ງ ແລະ ແຈກຢາຍສິນຄ້າ, ສະຖານີບໍລິການຍົກ-ຖ່າຍສິນຄ້າໜັກ, ບໍລິສັດຮັບເໝົາຂົນສົ່ງ, ໂຮງແຮມ, ຊຸດອາຄານໃຫ້ເຊົ່າ(apartment), ບ້ານຈັດສັນ, ອາຄານຫ້ອງການໃຫ້ເຊົ່າ, ການຈັດທົວທ່ອງທ່ຽວ, ການພັດທະນາແຫຼ່ງພັກຜ່ອນ, ສະຖານທີ່ຫຼິ້ນກິລາ, ສວນສະນຸກ, ແຫຼ່ງທ່ອງທ່ຽວ, ທະນາຄານ ຫຼື ສະຖາບັນການເງິນ, ການປະກັນໄພ, ກອງທຶນສະຫວັດດີການສັງຄົມ, ໂຮງຮຽນວິຊາຊີບ ແລະ ພັດທະນາສີມືແຮງງານ, ໂຮງຮຽນສາມັນສຶກສາ, ມະຫາວິທະຍາໄລ, ໂຮງໝໍ, ຮ້ານອາຫານ, ໄປສະນີ;

7.4 ຫ້ອງການຜູ້ຕາງໜ້າ ແລະ ສາຂາບໍລິສັດພາຍໃນ ຫຼື ຕ່າງປະເທດ ເຊັ່ນ: ຫ້ອງການຜູ້ຕາງໜ້າການຄ້າ (ເພື່ອຊຸກຍູ້ສົ່ງເສີມການສົ່ງອອກ), ຫ້ອງການຜູ້ຕາງໜ້າດ້ານການທ່ອງທ່ຽວ, ສາຂາບໍລິສັດ ທີ່ປຶກສາສາກົນ, ສາຂາບໍລິສັດການບິນ, ສາຂາບໍລິສັດຂົນສົ່ງສາກົນ;

- ບັນຊີລະອຽດກ່ຽວກັບກິດຈະການທີ່ຖືກສົ່ງເສີມໃຫ້ ແລະ ຫ້າມບໍ່ໃຫ້ ລົງທຶນ ຢູ່ໃນ **ຂສສຊ** ຈະໄດ້ກຳນົດອອກຕື່ມຕ່າງຫາກ.

### ມາດຕາ 8 ຜູ້ລົງທຶນຢູ່ໃນ ຂສສຊ

ລັດຖະບານແຫ່ງ ສປປ ລາວ ສົ່ງເສີມໃຫ້ບຸກຄົນ ແລະ ນິຕິບຸກຄົນທີ່ເປັນພົນລະເມືອງລາວ ລວມທັງຄົນລາວທີ່ອາໃສຢູ່ຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ມາລົງທຶນຢູ່ **ຂສສຊ** ໃນຂະແໜງທຸລະກິດຕ່າງໆ ທີ່ຖືກ ສົ່ງເສີມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ເທິງນັ້ນ.

### ມາດຕາ 9 ປະເພດ, ຮູບການ ແລະ ຮູບແບບການລົງທຶນ

ຜູ້ລົງທຶນ ພາຍໃນ **ຂສສຊ** ສາມາດດຳເນີນທຸລະກິດຂອງຕົນໄດ້ໃນປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ດັ່ງນີ້:

ປະເພດ: ວິສາຫະກິດເອກະຊົນ 100%, ວິສາຫະກິດຂອງລັດ, ວິສາຫະກິດລວມໝູ່, ຫຼື ວິສາ

ທະກິດປະສົມ (ວິສາຫະກິດລັດປະສົມກັບພາຍໃນ ຫຼື ຕ່າງປະເທດ, ວິສາຫະກິດເອກະຊົນປະສົມກັບ ພາຍໃນ ຫຼື ຕ່າງປະເທດ)

ຮູບການ: ວິສາຫະກິດສ່ວນບຸກຄົນ ຫຼື ບໍລິສັດ

ຮູບແບບ: ບໍລິສັດຫຸ້ນສ່ວນ, ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ ຂອງ ສປປ ລາວ.

**ມາດຕາ 10 ການຈັດຕັ້ງ ແລະ ເຄື່ອນໄຫວຂອງວິສາຫະກິດ**

ວິສາຫະກິດຕ່າງໆ ທີ່ມາລົງທຶນໃນ **ຂສສຊ** ໃຫ້ຈັດຕັ້ງ ແລະ ເຄື່ອນໄຫວຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ດຳລັດຂອງນາຍົກລັດຖະມົນຕີ ເລກທີ 148/ນຍ ວ່າດ້ວຍ **ຂສສຊ**, ຂໍ້ກຳນົດ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ ຂອງ **ຂສສຊ**, ກົດໝາຍວ່າດ້ວຍທຸລະກິດ ແລະ ກົດໝາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ;

**ມາດຕາ 11 ການຂຶ້ນທະບຽນທຸລະກິດໃນ ຂສສຊ**

ທຸກໆ ວິສາຫະກິດທີ່ໄດ້ຮັບການອະນຸມັດລົງທຶນໃນ **ຂສສຊ** ຈະຕ້ອງຂຶ້ນທະບຽນການດຳເນີນທູລະກິດ ໂດຍ ຄະນະບໍລິຫານ **ຂສສຊ.** ພາຍຫຼັງທີ່ໄດ້ປະຕິບັດຕາມລະບຽບການກ່ຽວກັບການສ້າງຕັ້ງບໍລິສັດ ຂອງ **ຂສສຊ** ຕາມດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ ຂອງ **ຂສສຊ** ແລ້ວວິສາຫະກິດນັ້ນ ສາມາດດຳເນີນທຸລະກິດຂອງຕົນໄດ້ຢູ່ໃນ **ຂສສຊ** ແລະ ຈະໄດ້ຮັບບຸລິມະສິດ ແລະ ສິດທິປະໂຫຍດຕ່າງໆ ທາງດ້ານທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

- ວິສາຫະກິດໃດທີ່ໄດ້ຂຶ້ນທະບຽນທຸລະກິດຢູ່ **ຂສສຊ** ແລ້ວ ສາມາດເຄື່ອນໄຫວ ແລະ ດຳເນີນການພົວພັນທຸລະກິດ ຢູ່ນອກ **ຂສສຊ** ໄດ້ຢ່າງຖືກຕ້ອງຕາມກົດໝາຍ ແຫ່ງ ສປປ ລາວ.

**ມາດຕາ 12 ການກໍ່ສ້າງພື້ນຖານໂຄງລ່າງຂອງ ຂສສຊ**

- ລັດຖະບານແຫ່ງ ສປປ ລາວ ອະນຸຍາດ ແລະ ສົ່ງເສີມໃຫ້ບັນດາບໍລິສັດຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດ ລົງທຶນພັດທະນາດ້ານພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆພາຍໃນ **ຂສສຊ** ດ້ວຍຮູບການມອບເໝົາ, ສຳປະທານ ຫຼື ຮ່ວມທຶນລະຫວ່າງພາກລັດ ແລະ ເອກະຊົນພາຍໃນ ແລະ/ຫຼື ຕ່າງປະເທດ.

- ໃນຊຸມປີເລີ່ມຕົ້ນການບຸກເບີກ ແລະ ພັດທະນາໂຄງລ່າງເບື້ອງຕົ້ນນັ້ນ ເພື່ອຊຸກຍູ້ ແລະ ເລັ່ງລັດການພັດທະນາ **ຂສສຊ** ໃຫ້ປະກົດຜົນເປັນຈິງໂດຍໄວ ແລະ ໃນກໍລະນີທີ່ຍັງບໍ່ສາມາດຊອກວິສາຫະກິດໃດມາພັດທະນາໂຄງລ່າງນັ້ນໄດ້ເທື່ອ ລັດຖະບານ ອາດຈະສະໜອງທຶນຈຳນວນໜຶ່ງໃຫ້ ຄະນະບໍລິຫານ **ຂສສຊ** ຈັດຕັ້ງປະຕິບັດ ບົນພື້ນຖານແຜນການພັດທະນາທີ່ໄດ້ກຳນົດອອກ.

**ມາດຕາ 13 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ**

ຊັບສິນ, ການລົງທຶນ ລວມທັງຜົນປະໂຫຍດອື່ນໆ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນ ຢູ່ໃນ **ຂສສຊ** ໄດ້ຮັບການປົກປ້ອງຢ່າງເຕັມສ່ວນ ດ້ວຍລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ ໂດຍຈະບໍ່ຖືກເກັບເກນ, ບໍ່ຖືກຢຶດ ຫຼື ໂອນເປັນຂອງລັດ, ເວັ້ນເສຍແຕ່ເປັນການປະຕິບັດຫຼັກການ ແລະ ເງື່ອນໄຂກ່ຽວກັບການລົງທຶນພາຍໃນ **ຂສສຊ** ທີ່ໄດ້ກຳນົດໄວ້ໃນ ດຳລັດສະບັບນີ້ ຫຼື ລະບຽບອື່ນໆ ທີ່ກ່ຽວຂ້ອງ ຂອງ **ຂສສຊ** ຫຼື ກົດໝາຍສະເພາະກ່ຽວກັບ ເຂດເສດຖະກິດພິເສດ ຢູ່ ສປປ ລາວ.

**ມາດຕາ 14 ອາຍຸການລົງທຶນພາຍໃນ ຂສສຊ**

ນັກລົງທຶນພາຍໃນ ແລະ ຕ່າງປະເທດທີ່ໄດ້ຮັບອະນຸຍາດໃຫ້ລົງທຶນພາຍໃນ **ຂສສຊ** ສາມາດເຄື່ອນໄຫວ ແລະ ດຳເນີນທຸລະກິດຂອງຕົນພາຍໃນເຂດໄດ້ໃນໄລຍະເວລາທີ່ໄດ້ລະບຸໄວ້ໃນໃບອະນຸຍາດການລົງທຶນ ທີ່ ຄະນະບໍລິຫານ **ຂສສຊ** ອອກໃຫ້ ຊຶ່ງມີກຳນົດເວລາ ສູງສຸດ 75 ປີ ແລະ ສາມາດ ຕໍ່ອາຍຸໄດ້ ຕາມການພິຈາລະນາເຫັນດີ ຂອງ ຄະນະບໍລິຫານ **ຂສສຊ.**

**ມາດຕາ 15 ທຶນຈົດທະບຽນ ແລະ ການປະກອບທຶນ**

15.1 ແຕ່ລະຮູບແບບຂອງວິສາຫະກິດທີ່ຈົດທະບຽນພາຍໃນ **ຂສສຊ** (ຍົກເວັ້ນຫ້ອງການຜູ້ຕາງໜ້າ) ຈະມີທຶນຈົດທະບຽນຕ່ຳສຸດ ຊຶ່ງຂຶ້ນກັບປະເພດ ທຸລະກິດການລົງທຶນ ດັ່ງນີ້:

- ສຳລັບກິດຈະການການຜະລິດ, ໂຮງຮຽນວິຊາຊີບ ການບໍລິການລະບົບສາງ ແລະ ບໍລິສັດຂົນສົ່ງ (ຊຶ່ງມີຍານພາຫະນະບັນທຸກໜັກຂອງຕົນເອງ), ກິດຈະການກໍ່ສ້າງໂຮງແຮມ, ການພັດທະນາກໍ່ສ້າງນິຄົມອຸດສະຫະກຳ ແລະ ໂຮງງານ, ເຮືອນພັກອາໄສ (ເປັນຕົ້ນຄື: ຊຸດອາຄານໃຫ້ເຊົ່າ, ບ້ານຈັດສັນ) ການພັດທະນາແຫຼ່ງທ່ອງທ່ຽວ (ລວມທັງສະຖານທີ່ຫຼິ້ນກິລາ, ສວນສະນຸກ, ບ່ອນພັກຜ່ອນ), ໂຮງຮຽນທົ່ວໄປ (ຊຶ່ງບໍ່ແມ່ນໂຮງຮຽນວິຊາຊີບ), ໂຮງໝໍ, ສູນສັບພະສິນຄ້າຂາຍຍ່ອຍ, ສາຂາບໍລິສັດພາຍໃນ ແລະ ຕ່າງປະເທດ ຕ້ອງມີທຶນຈົດທະບຽນຕ່ຳສຸດ 100,000 (ໜຶ່ງແສນ) ໂດລາ ສະຫະລັດ;
- ສຳລັບການບໍລິການຈັດສົ່ງ (ຊຶ່ງບໍ່ມີຍານພາຫະນະບັນທຸກໜັກຂອງຕົນເອງ), ການບໍລິການຈັດທົວທ່ອງທ່ຽວ, ກິດຈະການຄ້າຂາຍຍົກ ແລະ ຂາຍຍ່ອຍ, ການບໍລິການທົ່ວໄປ (ຊຶ່ງນອກຈາກກິດຈະການທີ່ໄດ້ກ່າວມາເທິງນັ້ນ) ຕ້ອງມີທຶນຈົດທະບຽນຕ່ຳສຸດ 50,000 (ຫ້າສິບພັນ) ໂດລາ ສະຫະລັດ;

15.2 ສຳລັບຫ້ອງການຜູ້ຕາງໜ້າດ້ານການຄ້າເພື່ອການສົ່ງເສີມການສົ່ງອອກ, ການຄ້າຜ່ານແດນ, ການທ່ອງທ່ຽວ ແລະ ດ້ານທຸລະກິດ ອື່ນໆ ຈະຕ້ອງມີທຶນຈົດທະບຽນຕ່ຳສຸດ 10,000 (ສິບພັນ)

ໂດລາສະຫະລັດ.

15.3 ການປະກອບທຶນຈົດທະບຽນຂອງ ວິສາຫະກິດພາຍໃນ **ຂສສຊ** ສາມາດຖອກເປັນເງິນສົດ ຫຼື ເປັນວັດຖຸ ກໍ່ໄດ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ, ການຖອກເປັນເງິນສົດ ແລະ ວັດຖຸ ຈະຖືກນຳເຂົ້າ ສປປ ລາວ ໂດຍສອດຄ່ອງກັບລະບຽບກົດໝາຍກ່ຽວກັບທະນາຄານແຫ່ງ ສປປ ລາວ ທີ່ມີຜົນນຳໃຊ້ໃນປະຈຸບັນ ຫຼື ສອດຄ່ອງກັບ ລະບຽບການສະເພາະຂອງ **ຂສສຊ** ທີ່ກ່ຽວຂ້ອງ.

15.4 ໃນກໍລະນີທີ່ ທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທີ່ໄດ້ຮັບການມອບໝາຍຈາກ ຄະນະບໍລິຫານ **ຂສສຊ** ຫາກບໍ່ສາມາດຢັ້ງຢືນກ່ຽວກັບການຕີລາຄາມູນຄ່າການນຳເຂົ້າທຶນທີ່ເປັນວັດຖຸ ຂອງວິສາຫະກິດ ຂອງ **ຂສສຊ** ນັ້ນ, ເວລານັ້ນ ວິສາຫະກິດ ດັ່ງກ່າວ ສາມາດໃຊ້ບໍລິການການຕີລາຄາ ຈາກຜູ້ກວດກາເອກະລາດກໍ່ໄດ້ ໂດຍການເຫັນດີເປັນລາຍລັກອັກສອນ ຈາກ ທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທີ່ໄດ້ຮັບການມອບໝາຍຈາກ ຄະນະບໍລິຫານ **ຂສສຊ**, ບົນພື້ນຖານລາຍຈ່າຍຂອງວິສະຫະກິດ ດັ່ງກ່າວ ແລະ ໃຫ້ຖືວ່າການຕີລາຄາມູນຄ່າດັ່ງກ່າວ ເປັນອັນສິ້ນສຸດ.

**ມາດຕາ 16 ມູນຄ່າການລົງທຶນຕໍ່າສຸດຢູ່ພາຍໃນ ຂສສຊ**

ຫົວໜ່ວຍທຸລະກິດຕ່າງໆ ທີ່ຂໍລົງທຶນຢູ່ໃນ **ຂສສຊ** (ຍົກເວັ້ນ ຫ້ອງການຜູ້ຕາງໜ້າ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 15 ເທິງນັ້ນ) ຊຶ່ງຈະໄດ້ຮັບສິດທິພິເສດ ດ້ານພາສີ-ອາກອນ ແລະ ນະໂຍບາຍສິ່ງເສີມອື່ນໆ ຕາມດຳລັດສະບັບນີ້ ຕ້ອງມີການລົງທຶນ ໃນມູນຄ່າ ທີ່ຕໍ່າສຸດ ດັ່ງນີ້:

- ສຳລັບການບໍລິການຈັດສົ່ງ (ຊຶ່ງບໍ່ມີຍານພະຫະນະບັນທຸກໜັກຂອງຕົນເອງ), ການບໍລິການຈັດທົວທ່ອງທ່ຽວ, ກິດຈະການຂາຍຍົກ ແລະ ຂາຍຍ່ອຍ ຕ້ອງມີມູນຄ່າການລົງທຶນ 150 000 (ໜຶ່ງແສນ ຫ້າສິບພັນ) ໂດລາ ສະຫະລັດ ຂຶ້ນໄປ;
- ສຳລັບກິດຈະການການຜະລິດ ແລະ ໂຮງຮຽນວິຊາຊີບ ຕ້ອງມີມູນຄ່າການລົງທຶນ 300 000 (ສາມແສນ) ໂດລາສະຫະລັດ ຂຶ້ນໄປ;
- ສຳລັບການບໍລິການລະບົບສາງ ແລະ ບໍລິສັດຂົນສົ່ງ (ຊຶ່ງມີຍານພາຫະນະບັນທຸກໜັກຂອງຕົນເອງ), ສູນສັບພະສິນຄ້າຂາຍຍ່ອຍ, ການພັດທະນາແຫຼ່ງທ່ອງທ່ຽວ (ລວມທັງສະຖານທີ່ຫຼິ້ນກິລາ, ສວນສະນຸກ, ບ່ອນພັກຜ່ອນ) ໂຮງຮຽນທົ່ວໄປ (ຊຶ່ງບໍ່ແມ່ນໂຮງຮຽນວິຊາຊີບ) ແລະ ໂຮງໝໍ ຕ້ອງມີມູນຄ່າການລົງທຶນ 500 000 (ຫ້າແສນ) ໂດລາສະຫະລັດ ຂຶ້ນໄປ;
- ສຳລັບກິດຈະການກໍ່ສ້າງໂຮງແຮມ, ການພັດທະນາກໍ່ສ້າງນິຄົມອຸດສາຫະກຳ ແລະ ໂຮງງານ, ເຮືອນພັກອາໃສ (ເປັນຕົ້ນຄື: ຊຸດອາຄານໃຫ້ເຊົ່າ, ບ້ານຈັດສັນ) ຕ້ອງມີມູນຄ່າການລົງທຶນ 1 000 000 (ໜຶ່ງລ້ານ) ໂດລາ ສະຫະລັດ ຂຶ້ນໄປ;
- ສຳລັບການບໍລິການທົ່ວໄປ (ຊຶ່ງນອກຈາກກິດຈະການທີ່ໄດ້ກ່າວມາເທິງນັ້ນ) ຕ້ອງມີມູນຄ່າ

ການລົງທຶນ 50 000 (ຫ້າສິບພັນ) ໂດລາສະຫະລັດ ຂຶ້ນໄປ;

## ໝວດທີ II
## ວ່າດ້ວຍ ການຂໍອະນຸຍາດລົງທຶນ, ເຊົ່າທີ່ດິນ, ປຸກສ້າງ, ການຍຸບເລີກກິດຈະການ, ສິດ ແລະ ພັນທະຂອງຜູ້ລົງທຶນ

### ມາດຕາ 17 ການຂໍອະນຸຍາດລົງທຶນ

- ບໍລິສັດ, ບຸກຄົນ ພາຍໃນ ຫຼື ຕ່າງປະເທດ ຜູ້ມີຈຸດປະສົງຢາກສ້າງຕັ້ງ ແລະ ດໍາເນີນທຸລະກິດ ໃນ **ຂສສຊ** ໃຫ້ຂໍອະນຸຍາດດໍາເນີນທຸລະກິດ ໂດຍກົງກັບ ຄະນະບໍລິຫານ **ຂສສຊ** ຕາມແບບຟອມທີ່ ຄະນະບໍລິຫານ **ຂສສຊ** ກໍານົດໃຫ້.
- ຄະນະບໍລິຫານ **ຂສສຊ** ຈະເປັນຜູ້ອອກໃບອະນຸຍາດການລົງທຶນ ລວມທັງຈົດທະບຽນວິສາຫະກິດ ດັ່ງກ່າວ ໂດຍ ບໍ່ຕ້ອງໄປ ຈົດທະບຽນ ຢູ່ ກະຊວງການຄ້າ ອີກ, ຄະນະບໍລິຫານ **ຂສສຊ** ຈະຕ້ອງສົ່ງບັນຊີ ແລະ ລາຍລະອຽດ ການຂຶ້ນທະບຽນເຫຼົ່ານັ້ນ ໃຫ້ແກ່ ກະຊວງການຄ້າ ເພື່ອຊາບຢ່າງຄົບຖ້ວນ ແລະ ປົກກະຕິ.
- ພາຍໃນກໍານົດເວລາສູງສຸດ 05 ວັນລັດຖະການ ນັບແຕ່ມື້ຍື່ນຄໍາຮ້ອງຂໍລົງທຶນ ເປັນຕົ້ນໄປ ຄະນະບໍລິຫານ **ຂສສຊ** ຈະອອກໃບອະນຸຍາດການລົງທຶນ ຫຼື ຕອບປະຕິເສດ ແກ່ຜູ້ຍື່ນເອກະສານຂໍລົງທຶນໃນ **ຂສສຊ.**

### ມາດຕາ 18 ການຂໍອະນຸຍາດເຊົ່າທີ່ດິນ, ເຊົ່າສິ່ງປຸກສ້າງ ແລະ ຂໍອະນຸຍາດປຸກສ້າງ

18.1 ຜູ້ລົງທຶນ ທີ່ໄດ້ຮັບອະນຸຍາດລົງທຶນໃນ **ຂສສຊ** ແລະ ຕ້ອງການເຊົ່າທີ່ດິນ ແລະ ເຊົ່າສິ່ງປຸກສ້າງ ພາຍໃນ **ຂສສຊ** ໃຫ້ຂໍອະນຸຍາດ ແລະ ເຮັດສັນຍາການເຊົ່າທີ່ດິນ, ເຊົ່າສິ່ງປຸກສ້າງ ໂດຍກົງກັບ ຄະນະບໍລິຫານ **ຂສສຊ** ( ຫຼື ກັບວິສາຫະກິດປະສົມລົງທຶນພັດທະນາໂຄງລ່າງຂອງ **ຂສສຊ**, ໃນກໍລະນີທີ່ ວິສາຫະກິດນີ້ມີສິດ ຕາມສັນຍາທີ່ໄດ້ເຊັນກັບລັດຖະບານ), ຊຶ່ງຕ້ອງໃຫ້ສອດຄ່ອງກັບລະບຽບການ ແລະ ຮ່າງສັນຍາ ທີ່ ຄະນະບໍລິຫານ **ຂສສຊ** ຈະກໍານົດອອກຕ່າງຫາກ.

18.2 ຜູ້ລົງທຶນທີ່ໄດ້ຮັບອະນຸຍາດລົງທຶນໃນ **ຂສສຊ** ແລະ ຕ້ອງການປຸກສ້າງ ເຄຫາສະຖານ, ໂຮງຈັກໂຮງງານ ແລະ ການກໍ່ສ້າງພັດທະນາຕ່າງໆ ໃນເນື້ອທີ່ດິນທີ່ຂໍເຊົ່ານັ້ນ ໃຫ້ຂໍອະນຸຍາດກໍ່ສ້າງ ໂດຍກົງກັບ ຄະນະບໍລິຫານ **ຂສສຊ**, ຊຶ່ງຕ້ອງໃຫ້ສອດຄ່ອງກັບມາດຕະຖານການປຸກສ້າງ ແລະ ດ້ານການປົກປັກຮັກສາສິ່ງແວດລ້ອມ ຕາມລະບຽບການທີ່ ຄະນະບໍລິຫານ **ຂສສຊ** ຈະກໍານົດອອກຕ່າງຫາກ.

18.3 ໃນກໍລະນີທີ່ມີການປຸກສ້າງອາຄານ ໂດຍບໍ່ໄດ້ຮັບອະນຸຍາດຕາມ ມາດຕາ 18.1 ຫຼື ໃນກໍລະນີທີ່ການປຸກສ້າງອາຄານ ແຕກຕ່າງຈາກແຜນຜັງແບບກໍ່ສ້າງ ຫຼື ລາຍການທີ່ໄດ້ຮັບອະນຸຍາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກໍານົດໄວ້ໃນໃບອະນຸຍາດການປຸກສ້າງ ແລະ ການ

ຮັກສາສິ່ງແວດລ້ອມແລ້ວ ຄະນະບໍລິຫານ **ຂສສຊ** ມີສິດສັ່ງໃຫ້ຢຸດຕິການກໍ່ສ້າງ ເພື່ອໃຫ້ແກ້ໄຂ ປັບປຸງ ຫຼື ຮື້ຖອນອາຄານ ຫຼື ສ່ວນໃດສ່ວນໜຶ່ງຂອງອາຄານດັ່ງກ່າວ ພາຍໃນໄລຍະເວລາອັນສົມຄວນ ໂດຍແຈ້ງໄລຍະເວລາ ໃຫ້ຜູ້ລົງທຶນ ທີ່ປຸກສ້າງ ຫຼື ຜູ້ຄອບຄອງອາຄານນັ້ນຊາບ.

18.4 ເມື່ອພົ້ນກຳນົດໄລຍະເວລາຕາມ ມາດຕາ 18.2 ແລ້ວ ແລະ ຜູ້ລົງທຶນປຸກສ້າງ ຫຼື ຜູ້ຄອບຄອງອາຄານບໍ່ປະຕິບັດຕາມຄຳສັ່ງຂອງ ຄະນະບໍລິຫານ **ຂສສຊ**, ຄະນະບໍລິຫານ **ຂສສຊ** ມີສິດຈັດການຕາມທີ່ເຫັນສົມຄວນກັບການປຸກສ້າງອາຄານນັ້ນ ເພື່ອແກ້ໄຂ ປັບປຸງ ຫຼື ຮື້ຖອນອາຄານ ຫຼື ສ່ວນໃດສ່ວນໜຶ່ງຂອງອາຄານນັ້ນໄດ້ ໂດຍຈະຄິດຄ່າໃຊ້ຈ່າຍຈາກຜູ້ລົງທຶນປຸກສ້າງ ຫຼື ຜູ້ຄອບຄອງອາຄານ.

## ມາດຕາ 19 ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ

ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ ໃນ **ຂສສຊ** ມີດັ່ງນີ້:

- ເຊົ່າທີ່ດິນ, ອາຄານ, ບ່ອນພັກອາໃສ, ຫ້ອງການ ແລະ ໂຮງງານ;
- ກໍ່ສ້າງເຄຫາສະຖານ, ໂຮງງານ, ພັດທະນາແຫຼ່ງພັກຜ່ອນ ແລະ ທ່ອງທ່ຽວ;
- ນຳໃຊ້ການບໍລິການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ຢູ່ໃນ **ຂສສຊ;**
- ສົ່ງອອກຜະລິດຕະພັນສິນຄ້າທີ່ຜະລິດ, ປະກອບ ຫຼື ປຸງແຕ່ງຢູ່ໃນເຂດ, ນຳເຂົ້າອຸປະກອນ, ວັດຖຸດິບ ແລະ ພາຫະນະການຜະລິດທີ່ຈຳເປັນສຳລັບທຸລະກິດ;
- ດຳເນີນທຸລະກິດການບໍລິການທີ່ເໝາະສົມ ຕາມໃບອະນຸຍາດລົງທຶນ ແລະ ກົດລະບຽບຂອງບໍລິສັດ;
- ຄັດເລືອກ ແລະ ນຳໃຊ້ແຮງງານ ໂດຍອີງໃສ່ກົດໝາຍແຮງງານຂອງ ສປປ ລາວ ແລະ ລະບຽບການສະເພາະຂອງ **ຂສສຊ** ທີ່ກ່ຽວຂ້ອງ;
- ໂອນທຶນ ຫຼື ລາຍໄດ້ຂອງນັກລົງທຶນຕ່າງປະເທດ ກັບຄືນປະເທດຂອງຕົນ ຫຼື ໄປປະເທດທີ່ສາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ, ຂໍ້ກຳນົດສະບັບນີ້ ແລະ ລະບຽບການສະເພາະຂອງ **ຂສສຊ** ທີ່ກ່ຽວຂ້ອງ;
- ໂອນກຳມະສິດ, ສິດຄອບຄອງ, ສິດນຳໃຊ້ ໃບອະນຸຍາດການລົງທຶນ, ຊັບສົມບັດຂອງຕົນ ແລະ ທີ່ດິນ ໃຫ້ແກ່ບຸກຄົນທີສາມໂດຍໄດ້ຮັບການຮັບຮອງຈາກ ຄະນະບໍລິຫານ **ຂສສຊ** ຕາມດຳລັດສະບັບນີ້, ດຳລັດຂອງນາຍົກລັດຖະມົນຕີ ເລກທີ່ 148/ນຍ ແລະ ລະບຽບການຂອງ **ຂສສຊ** ທີ່ກ່ຽວຂ້ອງ ທີ່ຈະກຳນົດ ອອກຕ່າງຫາກ;
- ໄດ້ຮັບນະໂຍບາຍ ແລະ ຜົນປະໂຫຍດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ກຳນົດສະບັບນີ້ ແລະ ລະບຽບການຂອງ **ຂສສຊ** ອື່ນໆ ທີ່ກ່ຽວຂ້ອງ.

## ມາດຕາ 20 ການຍຸບເລີກ ຫຼື ລົ້ມລະລາຍຂອງ ວິສະຫະກິດ, ການໂອນກິດຈະການໃຫ້ແກ່ຜູ້ອື່ນ ແລະ ການປ່ອຍປະກິດຈະການ

20.1 ວິສາຫະກິດ ທີ່ຂຶ້ນທະບຽນ ຢູ່ໃນ **ຂສສຊ** ທີ່ມີຈຸດປະສົງ ຢາກຍຸບເລີກວິສາຫະກິດຂອງຕົນ ຫຼື ປະກາດລົ້ມລະລາຍ ຫຼື ຕ້ອງການໂອນກິດຈະການໃຫ້ແກ່ຜູ້ອື່ນ ຕ້ອງປະຕິບັດຕາມລະບຽບກົດ ໝາຍວ່າດ້ວຍວິສາຫະກິດ ຫຼື ກົດໝາຍວ່າດ້ວຍການລົ້ມລະລາຍ, ບົດແນະນຳ ແລະ ຂັ້ນຕອນຕາມລະບຽບການທີ່ກ່ຽວຂ້ອງ ຂອງ **ຂສສຊ** ທີ່ຈະກຳນົດອອກຕ່າງຫາກ ແລະ ວິສາຫະກິດນັ້ນ ຈະຕ້ອງໂອນກຳມະສິດການນຳໃຊ້ທີ່ດິນຂອງຕົນໃຫ້ແກ່ຜູ້ອື່ນນຳໃຊ້ ຫຼື ໂອນຄືນໃຫ້ແກ່ ຄະນະບໍລິຫານ **ຂສສຊ** ຫຼື ວິສາຫະກິດປະສົມລົງທຶນພັດທະນາໂຄງລ່າງຂອງ **ຂສສຊ** (ຕາມທີ່ໄດ້ ລະບຸໄວ້ໃນ ມາດຕາ 60 ຂອງດຳລັດສະບັບນີ້) ເພື່ອໃຫ້ຊ່ວຍຊອກຫາລູກຄ້າ ຜູ້ອື່ນ ມາເຊົ່າຕໍ່ ບົນພື້ນຖານການເຈລະຈາກັບວິສາຫະກິດ ຜູ້ຖືກຳມະສິດນຳໃຊ້ທີ່ດິນຜູ້ທຳອິດນັ້ນ ໂດຍໃຫ້ສຳເລັດພາຍ ໃນກຳນົດ ເວລາສອງປີ ນັບຈາກມື້ຂໍຍຸບເລີກ ຫຼື ໂອນກິດຈະການ ແລະ ໂດຍໃຫ້ສອດຄ່ອງກັບລະບຽບການທີ່ ຄະນະບໍລິຫານ **ຂສສຊ** ຈະໄດ້ກຳນົດອອກຕ່າງຫາກ;

20.2 ໃນກໍລະນີ ທີ່ ວິສາຫະກິດ ທີ່ຂຶ້ນທະບຽນຢູ່ໃນ **ຂສສຊ** ບໍ່ສືບຕໍ່ກິດຈະການ ຂອງຕົນດ້ວຍເຫດຜົນໃດກໍຕາມເປັນເວລາເກີນໜຶ່ງປີຂຶ້ນໄປ ແລະ ວິສາຫະກິດນັ້ນ ບໍ່ໄດ້ປະຕິບັດຕາມ ມາດຕາ 20.1 ເທິງນັ້ນ ຄະນະບໍລິຫານ **ຂສສຊ** ຈະຕ້ອງຕິດຕໍ່ພົວພັນເຖິງ ເຈົ້າຂອງກິດຈະການນັ້ນ ແລະ ຈາກເວລານັ້ນອີກ ຫົກເດືອນ ຖ້າຫາກເຈົ້າຂອງວິສາຫະກິດນັ້ນຫາກບໍ່ຕິດຕໍ່ພົວພັນຄືນມາ ແຕ່ປະການໃດ ຫຼື ໄດ້ຕິດຕໍ່ຄືນມາ ແລ້ວແຕ່ບໍ່ສາມາດປະຕິບັດຕາມມາດຕາ 20.1 ເທິງນັ້ນ ຄະນະບໍລິຫານ **ຂສສຊ** ຈະມີສິດ (ຫຼື ຈະມອບໃຫ້ວິສາຫະກິດປະສົມລົງທຶນພັດທະນາໂຄງລ່າງຂອງ **ຂສສຊ**) ເຂົ້າໄປກຳກັບ ແລະ ຈັດການກ່ຽວກັບຊັບສິນ ແລະ ທີ່ດິນຂອງວິສາຫະກິດດັ່ງກ່າວ ເພື່ອຊອກຫາ ວິສາຫະກິດອື່ນ ມາເຊົ່າຕໍ່. ແຕ່ມື້ໃດທີ່ ວິສາຫະກິດຜູ້ທີ່ໄດ້ລົງທຶນ ແລະ ເປັນກຳມະສິດນຳໃຊ້ທີ່ດິນ ຜູ້ທຳອິດໄດ້ກັບມາແລ້ວ ແລະ ຖ້າຕຶກອາຄານເພີ່ມຂອງຜູ້ລົງທຶນຍັງຖືກນຳໃຊ້ ໂດຍບໍ່ໄດ້ຖືກທັບມ້າງ ກໍຈະຕ້ອງມີການຕີລາຄາຄ່າຊັບສິນນັ້ນຄືນໃຫ້ແກ່ຜູ້ທີ່ໄດ້ລົງທຶນທາອິດນັ້ນ ບົນພື້ນຖານຫຼັກການຄິດໄລ່ຄ່າຫຼຸ້ຍຫ້ຽນ ແລະ ລະບຽບການດ້ານບັນຊີ ແລະ ຊັບສິນ ທີ່ ຄະນະບໍລິຫານ **ຂສສຊ** ຈະໄດ້ກຳນົດອອກຕ່າງຫາກ.

## ມາດຕາ 21 ການຈັດການຕໍ່ຊັບສິນຂອງຜູ້ລົງທຶນພາຍຫຼັງໝົດອາຍຸການເຊົ່າທີ່ດິນ

21.1 ໃນກໍລະນີທີ່ ວິສາຫະກິດ ທີ່ຂຶ້ນທະບຽນຢູ່ໃນ ຂສສຊ ຫາກໝົດອາຍຸການລົງທຶນ ແລະ ໝົດອາຍຸການເຊົ່າທີ່ດິນ ຈາກ ຄະນະບໍລິຫານ **ຂສສຊ** ແລະ ບໍ່ຕ້ອງການດຳເນີນກິດຈະການຕໍ່ ຫຼື ບໍ່ຕ້ອງການເຊົ່າທີ່ດິນນັ້ນຕໍ່ ຖືວ່າ ວິສາຫະກິດນັ້ນ ໝົດກຳມະສິດນຳໃຊ້ທີ່ດິນຕອນນັ້ນແລ້ວນັບຈາກວັນທີໝົດອາຍຸການເຊົ່າທີ່ດິນທີ່ໄດ້ ເຊັນສັນຍາໄວ້ກັບ ຄະນະບໍລິຫານ **ຂສສຊ** ຫຼື ກັບວິສາຫະກິດປະສົມລົງທຶນພັດທະນາໂຄງລ່າງເຂດ (ຖ້າຫາກວິສາຫະກິດນັ້ນບໍ່ໄດ້ຂໍຕໍ່ອາຍຸການເຊົ່າທີ່ດິນຕື່ມອີກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງດຳລັດສະບັບນີ້) ເນື້ອທີ່ດິນດັ່ງກ່າວຈະກັບຄືນມາເປັນກຳມະສິດ ຂອງ

ຄະນະບໍລິຫານ **ຂສສຊ** (ຫຼື ຂອງວິສາຫະກິດປະສົມລົງທຶນພັດທະນາໂຄງລ່າງຂອງ **ຂສສຊ** ຕາມທີ່ໄດ້ລະບຸໄວ້ໃນສັນຍາການຮ່ວມທຶນ ຫຼື ສັນຍາສຳປະທານທີ່ໄດ້ເຊັນກັບ ຄະນະບໍລິຫານ **ຂສສຊ** ຫຼື ກັບລັດຖະບານ) ນັບຈາກວັນໝົດອາຍຸເຊົ່າທີ່ດິນດັ່ງກ່າວ. ສຳລັບຊັບສິນ ແລະ ສິ່ງປຸກສ້າງຕ່າງໆ (ຊັບສິນບັດຄົງທີ່) ຢູ່ເທິງໜ້າດິນຕອນນັ້ນ ຍັງຖືວ່າເປັນກຳມະສິດຂອງວິສາຫະກິດຜູ້ລົງທຶນໃສ່ການຕິດຕັ້ງ ຫຼື ປຸກສ້າງຊັບສິນດັ່ງກ່າວນັ້ນ ຊຶ່ງວິສາຫະກິດນັ້ນມີສິດ ແລະ ຕ້ອງຈັດການກັບຊັບສິນດັ່ງກ່າວ ເຊັ່ນ: ຖອດຖອນ ຫຼື ທັບມ້າງຖິ້ມ ຫຼື ມອບໂອນ ຫຼື ຂາຍໃຫ້ແກ່ວິສາຫະກິດອື່ນ, ຄະນະບໍລິຫານ **ຂສສຊ**, ວິສາຫະກິດຮ່ວມລົງທຶນພັດທະນາໂຄງລ່າງຂອງ **ຂສສຊ** ຫຼື ບຸກຄົນອື່ນ ເພື່ອສາມາດໄດ້ນຳໃຊ້ ແລະ ບໍ່ໃຫ້ເປັນການຈັບຈອງທີ່ດິນດັ່ງກ່າວ ຊຶ່ງເປັນການກີດຂວາງການນຳໃຊ້ທີ່ດິນ ແລະ ຊັບສິນ ດັ່ງກ່າວ ທັງນີ້ກໍເພື່ອໃຫ້ເກີດປະໂຫຍດຕໍ່ສ່ວນລວມ.

21.2 ວິສາຫະກິດທີ່ເປັນເຈົ້າຂອງຊັບສິນຄົງທີ່ດັ່ງກ່າວ ຈະຕ້ອງຈັດການກັບຊັບສິນຂອງຕົນໃຫ້ສຳເລັດພາຍໃນເວລາສູງສຸດບໍ່ໃຫ້ເກີນ 01 ປີ ນັບຈາກວັນໝົດອາຍຸເຊົ່າທີ່ດິນ. ຖ້າຫາກວິສາຫະກິດນັ້ນບໍ່ສາມາດດຳເນີນການພາຍໃນກຳນົດເວລາດັ່ງກ່າວ ຄະນະບໍລິຫານ **ຂສສຊ** (ຫຼື ວິສາຫະກິດປະສົມລົງທຶນພັດທະນາໂຄງລ່າງຂອງ **ຂສສຊ** ຕາມທີ່ໄດ້ລະບຸໄວ້ໃນສັນຍາການຮ່ວມທຶນ ຫຼື ສັນຍາສຳປະທານທີ່ໄດ້ເຊັນກັບ ຄະນະບໍລິຫານ **ຂສສຊ** ຫຼື ກັບລັດຖະບານ) ຈະມີສິດເຂົ້າໄປກຳກັບ ແລະ ຈັດການກ່ຽວກັບຊັບສິນຂອງວິສາຫະກິດດັ່ງກ່າວ ເພື່ອໃຫ້ວິສາຫະກິດອື່ນ, ຄະນະບໍລິຫານ **ຂສສຊ** ຫຼື ວິສາຫະກິດປະສົມລົງທຶນ ພັດທະນາໂຄງລ່າງຂອງ **ຂສສຊ** ຊື້ຕໍ່ຈາກ ວິສາຫະກິດ ທີ່ເປັນເຈົ້າຂອງນັ້ນ (ຫຼື ຖອດຖອນຫຼື ທັບມ້າງຖິ້ມ) ບົນພື້ນຖານການເຈລະຈາ ແລະ ເຫັນດີຈາກທັງສອງຝ່າຍ, ໂດຍມີການຕີລາຄາຄ່າຊັບສິນນັ້ນຄືນໃຫ້ແກ່ ຜູ້ທີ່ໄດ້ລົງທຶນທຳອິດນັ້ນ ຕາມຫຼັກການຄິດໄລ່ຄ່າ ຫຼຸ້ຍຫ້ຽນ ແລະ ລະບຽບການດ້ານບັນຊີ ແລະ ຊັບສິນ ທີ່ ຄະນະບໍລິຫານ **ຂສສຊ** ຈະໄດ້ກຳນົດອອກຕ່າງຫາກ.

### ມາດຕາ 22 ພັນທະຂອງຜູ້ລົງທຶນ

ຜູ້ລົງທຶນ ທີ່ຂຶ້ນທະບຽນຢູ່ໃນ **ຂສສຊ** ມີພັນທະ ດັ່ງນີ້:

- ວາງແຜນການ ແລະ ນຳສະເໜີໂຄງການລົງທຶນ ແລະ ຄວາມຕ້ອງການນຳໃຊ້ລະບົບໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກພາຍໃນ **ຂສສຊ** ເພື່ອເປັນບ່ອນອີງໃຫ້ພາກສ່ວນພັດທະນາໂຄງລ່າງສາມາດຕອບສະໜອງຕາມຄວາມຕ້ອງການ ຫຼື ແບ່ງຄວາມຮັບຜິດຊອບໃນການປະຕິບັດເພື່ອໃຫ້ທ່ວງທັນກັບເວລາ.
- ເສຍພາສີ, ສ່ວຍສາອາກອນ ແລະ ພັນທະອື່ນໆ ຕາມດຳລັດສະບັບນີ້, ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລະບຽບການອື່ນໆ ຊຶ່ງກ່ຽວຂ້ອງກັບ **ຂສສຊ** ຫຼື ທີ່ ຄະນະບໍລິຫານ **ຂສສຊ** ກຳນົດອອກ;
- ໃຫ້ການຮ່ວມມືແກ່ການປະຕິບັດງານ ຂອງ ຄະນະບໍລິຫານ **ຂສສຊ;**

- ເປີດບັນຊີເງິນກີບ ແລະ ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ໃນ **ຂສສຊ** ຫຼື ຢູ່ທະນາຄານຕ່າງໆ ທີ່ຕັ້ງຢູ່ ສປປ ລາວ;
- ປະຕິບັດລະບອບລາຍງານ ຕາມກົດໝາຍວ່າດ້ວຍການບັນຊີວິສາຫະກິດຂອງ ສປປ ລາວ ແລະ ລະບຽບການສະເພາະຂອງ **ຂສສຊ** ທີ່ກ່ຽວຂ້ອງ;
- ປະຕິບັດລະບອບລາຍງານກ່ຽວກັບຄວາມຄືບໜ້າຂອງກິດຈະການ/ໂຄງການ ປະຈຳງວດ ແລະ ປະຈຳປີ ໃຫ້ຄະນະບໍລິຫານ **ຂສສຊ** ຊາບຢ່າງປົກກະຕິ;
- ໃຫ້ຄວາມຮ່ວມມື ແລະ ຂໍ້ສະດວກແກ່ຄະນະບໍລິຫານ **ຂສສຊ** ໃນການເຂົ້າໄປ ຕິດຕາມກວດກາກິດຈະການ;
- ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມປອດໄພໃນການໃຊ້ແຮງງານ, ປ້ອງກັນອັກຄີໄພ, ຮັກສາອະນາໄມ ແລະ ສິ່ງແວດລ້ອມ;
- ປະຕິບັດຂໍ້ກຳນົດກົດລະບຽບອື່ນໆ ທີ່ ຄະນະບໍລິຫານ **ຂສສຊ** ວາງອອກ;

**ມາດຕາ 23 ນະໂຍບາຍຕໍ່ຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າທີ່ ຂຶ້ນທະບຽນໄດ້ຢູ່ໃນ **ຂສສຊ** ເປັນຕົ້ນແມ່ນຢູ່ໃນຂະແໜງການຄ້າ ແລະ ການບໍລິການ ທີ່ສົ່ງເສີມການສົ່ງອອກ ແລະ ການທ່ອງທ່ຽວ, ຫ້ອງການຜູ້ຕາງໜ້າ ດັ່ງກ່າວ ຈະມີໜ້າທີ່ສະເພາະແຕ່ເກັບກຳຂໍ້ມູນດ້ານການຕະຫຼາດເພື່ອລາຍງານໃຫ້ບໍລິສັດແມ່, ເປັນບ່ອນຕິດຕໍ່ພົວພັນທັງພາຍໃນ ແລະ ຕ່າງປະເທດ ເພື່ອອຳນວຍຄວາມສະດວກໃຫ້ບໍລິສັດແມ່, ຕິດຕາມການປະຕິບັດສັນຍາການລົງທຶນ ແລະ ການບໍລິການໃນນາມຂອງບໍລິສັດແມ່ເທົ່ານັ້ນ. ຫ້າມບໍ່ໃຫ້ຫ້ອງການຜູ້ຕາງໜ້າດຳເນີນທຸລະກິດເພື່ອສ້າງລາຍໄດ້. ຫ້ອງການຜູ້ຕາງໜ້າທີ່ໄດ້ຂຶ້ນທະບຽນໃນ **ຂສສຊ** ຈະໄດ້ຮັບສິດທິພິເສດສະເພາະແຕ່ສຳລັບການເສຍອາກອນລາຍໄດ້ສ່ວນບຸກຄົນເທົ່ານັ້ນ ຕາມດຳລັດສະບັບນີ້, ນອກຈາກນີ້ແລ້ວ ຈະບໍ່ໄດ້ຮັບສິດທິພິເສດກ່ຽວກັບການສົ່ງເສີມການລົງທຶນໃດອີກຕາມດຳລັດສະບັບນີ້.

## ໝວດທີ III
## ວ່າດ້ວຍ ນະໂຍບາຍສົ່ງເສີມການລົງທຶນ ແລະ ເຊົ່າທີ່ດິນໃນ ຂສສຊ

**ມາດຕາ 24 ນະໂຍບາຍທົ່ວໄປ**

ລັດຖະບານແຫ່ງ ສປປ ລາວ ຊຸກຍູ້ ແລະ ສົ່ງເສີມການລົງທຶນໃນເຂດ **ຂສສຊ** ດ້ວຍການປະຕິບັດນະໂຍບາຍຕ່າງໆ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 29 ກັນຍາ 2003 ວ່າດ້ວຍ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ, ຂໍ້ກຳນົດ ແລະ ລະບຽບການອື່ນໆ ທີ່ກ່ຽວກັບ **ຂສສຊ**, ກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ.

**ມາດຕາ 25 ນະໂຍບາຍສ່ວຍສາອາກອນ**

ຜູ້ລົງທຶນໃນ **ຂສສຊ** ຈະໄດ້ຮັບການຍົກເວັ້ນ ແລະ ເສຍອາກອນຕ່າງໆ ໃນອັດຕາພິເສດ ດັ່ງນີ້:

25.1 ອາກອນຕົວເລກທຸລະກິດ:

- ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການຢູ່ໃນ **ຂສສຊ** ເມື່ອເວລາສິນຄ້າເຄື່ອງຂອງທີ່ນຳເຂົ້າມາຈາກຕ່າງປະເທດ ເພື່ອນຳມາຮັບໃຊ້, ປຸງແຕ່ງ, ຜະລິດ ຫຼື ຂາຍພາຍໃນ **ຂສສຊ** ລວມເຖິງກິດຈະການການບໍລິການ ທີ່ເຄື່ອນໄຫວຢູ່ໃນ **ຂສສຊ** ຈະບໍ່ໄດ້ຖືກຄິດໄລ່ເກັບອາກອນຕົວເລກທຸລະກິດ.
- ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດໃນ **ຂສສຊ** ດ້ານການຜະລິດ, ການຄ້າ, ການບໍລິການ ແລະ ການນຳເຂົ້າສິນຄ້າເຄື່ອງຂອງເຂົ້າມາເຄື່ອນໄຫວຢູ່ ພາຍໃນປະເທດ ນອກຂອບເຂດ **ຂສສຊ** ໃນເວລາ ຊື້-ຂາຍຜະລິດຕະພັນ, ສິນຄ້າ ແລະ ໃຫ້ການບໍລິການຕ່າງໆ ຈະໄດ້ຮັບການຍົກເວັ້ນອາກອນຕົວເລກທຸລະກິດ ສຳລັບສິນຄ້າໃນບັນຊີຕາມ ມາດຕາ 9 ຂອງ ກົດໝາຍສ່ວຍສາອາກອນ.
- ສິນຄ້າເຄື່ອງຂອງ ແລະ ກິດຈະການບໍລິການຕ່າງໆ ທີ່ນຳອອກຈາກ **ຂສສຊ** ເພື່ອນຳໄປຂາຍ ແລະ ໃຫ້ການບໍລິການພາຍໃນປະເທດ ນອກ **ຂສສຊ** ຈະຕ້ອງຖືກເສຍອາກອນຕົວເລກທຸລະກິດ ຕາມມາດຕາ 12 ຂອງກົດໝາຍສ່ວຍສາອາກອນ.

25.2 ອາກອນຊົມໃຊ້:

- ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດຂະແໜງການຕ່າງໆ ຢູ່ໃນ **ຂສສຊ** ເມື່ອເວລານຳສິນຄ້າເຄື່ອງຂອງຈາກຕ່າງປະເທດ ຫຼື ພາຍໃນປະເທດ (ຈາກນອກເຂດ **ຂສສຊ**) ເຂົ້າມາເຄື່ອນໄຫວຮັບໃຊ້, ການບໍລິການ, ປຸງແຕ່ງ, ຜະລິດ, ຊື້-ຂາຍ ພາຍໃນ **ຂສສຊ** ຈະບໍ່ຖືກຄິດໄລ່ເກັບອາກອນຊົມໃຊ້ ລວມທັງບັນດາສິນຄ້າເຄື່ອງຂອງທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍສ່ວຍສາອາກອນ ກໍບໍ່ໄດ້ເກັບເຊັ່ນກັນ.
- ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດໃນ **ຂສສຊ** ດ້ານການຜະລິດ, ການຄ້າ, ການບໍລິການ ແລະ ການນຳເຂົ້າສິນຄ້າເຄື່ອງຂອງ ຈາກຕ່າງປະເທດ ເຂົ້າມາເຄື່ອນໄຫວ, ຮັບໃຊ້, ຊື້-ຂາຍ ຢູ່ພາຍໃນປະເທດ ນອກຂອບເຂດ **ຂສສຊ** ຈະໄດ້ຮັບການຍົກເວັ້ນອາກອນຊົມໃຊ້ ສຳລັບສິນຄ້າໃນບັນຊີຕາມ ມາດຕາ 21 ຂອງກົດໝາຍສ່ວຍສາອາກອນ.
- ສິນຄ້າ ເຄື່ອງຂອງ ແລະ ກິດຈະການຕ່າງໆ ທີ່ນຳເຂົ້າມາຮັບໃຊ້, ຊື້-ຂາຍ ແລະ ໃຫ້ການບໍລິການຕ່າງໆ ຢູ່ພາຍໃນປະເທດ ນອກຂອບເຂດ **ຂສສຊ** ຈະຕ້ອງໄດ້ເສຍອາກອນຊົມໃຊ້ຕາມມາດຕາ 23 ຂອງກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆຂອງລັດຖະບານແຫ່ງ ສປປ ລາວ.

25.3 ການຫັກຄືນອາກອນ:

- ຜູ້ດຳເນີນການຜະລິດ ຫຼື ປຸງແຕ່ງຜະລິດຕະພັນສິນຄ້າຢູ່ພາຍໃນປະເທດ ຈະໄດ້ຮັບການຍົກເວັ້ນ ຫຼື ຫັກຄືນອາກອນຕົວເລກທຸລະກິດ ແລະ ອາກອນຊົມໃຊ້ໃນເວລາຂາຍສິນຄ້າ ເຄື່ອງຂອງໃຫ້ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວຢູ່ໃນ **ຂສສຊ.** ຜູ້ມີສິດໄດ້ຮັບການຍົກເວັ້ນ ຫຼື ຫັກຄືນອາກອນດັ່ງກ່າວ ຕ້ອງແມ່ນຜູ້ທີ່ໄດ້ຂຶ້ນທະບຽນອາກອນຢູ່ນຳລັດຖະການສ່ວຍສາອາກອນ ຫຼື ໜ່ວຍງານທີ່ກ່ຽວຂ້ອງທີ່ໄດ້ຖືກມອບໝາຍຈາກ ຄະນະບໍລິຫານ **ຂສສຊ** ແລະ ຖືບັນຊີຢ່າງຖືກຕ້ອງພ້ອມທັງມີເອກະສານການເສຍອາກອນຄົບຖ້ວນມາ ຢັ້ງຢືນ ເຊັ່ນ: ໃບຮັບເງິນອາກອນ, ໃບຈຳໜ່າຍສິນຄ້າ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ.

25.4 ຂໍ້ຫ້າມ:

- ບໍ່ອະນຸຍາດໃຫ້ນັກລົງທຶນພາຍໃນປະເທດ (ຊຶ່ງຢູ່ນອກ **ຂສສຊ**) ທີ່ເນີນທຸລະກິດການຄ້າຂາເຂົ້ານຳສິນຄ້າເຄື່ອງຂອງທີ່ນຳເຂົ້າຈາກຕ່າງປະເທດ ເຂົ້າມາຂາຍໃນ **ຂສສຊ,** ນອກຈາກກໍລະນີນຳເຂົ້າເພື່ອສົ່ງຂາຍຕໍ່ໄປຕ່າງປະເທດ ຫຼື ຕາມກໍລະນີຕ່າງໆ ທີ່ໄດ້ຮັບອະນຸຍາດຈາກ ຄະນະບໍລິຫານ **ຂສສຊ**.

25.5 ຂອບເຂດພົນສັກສິດ:

- ນະໂຍບາຍກ່ຽວກັບອາກອນຕົວເລກທຸລະກິດ ແລະ ອາກອນຊົມໃຊ້ຈະຖືກປະຕິບັດຢູ່ໃນຂອບເຂດ **ຂສສຊ** ເທົ່ານັ້ນ, ຖ້າຜູ້ໃດໄດ້ຮັບອະນຸຍາດດຳເນີນທຸລະກິດຢູ່ໃນ **ຂສສຊ** ແລະ ໄປຊົມໃຊ້ເຄື່ອງຂອງ, ຊື້-ຂາຍສິນຄ້າ ແລະ ນຳໃຊ້ການບໍລິການຕ່າງໆ ຢູ່ພາຍໃນປະເທດ ນອກ **ຂສສຊ** ຕ້ອງປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ຢ່າງຄົບຖ້ວນ.

25.6 ອາກອນກຳໄລ:

- ການກຳນົດ, ຜ່ອນຜັນ ຫຼື ຍົກເວັ້ນອາກອນກຳໄລໃຫ້ຜູ້ໄດ້ຮັບອະນຸຍາດລົງທຶນໃນ **ຂສສຊ** ໃນແຕ່ລະຂະແໜງການ ມີ ດັ່ງນີ້:

ກ. ຂະແໜງການຜະລິດ

ກິດຈະການການຜະລິດແມ່ນການຜະລິດ, ການປຸງແຕ່ງ, ການປະກອບ, ການແປຮູບ, ການປ່ຽນແປງສະພາບວັດຖຸດິບ ຫຼື ວັດຖຸສິ່ງຂອງອອກເປັນຜະລິດຕະພັນອັນໃໝ່ ເຊັ່ນ: ໂຮງງານເຟີນີເຈີ, ໂຮງງານປະກອບພາຫະນະ, ໂຮງງານປະກອບສິ້ນສ່ວນເອເລັກໂຕຣນິກ ແລະ ການຜະລິດອື່ນໆ.

- ການຜະລິດ ແລະ ປຸງແຕ່ງເພື່ອສົ່ງອອກຂາຍໄປຕ່າງປະເທດ ຈະໄດ້ຮັບການຍົກເວັ້ນ ແລະ ຜ່ອນຜັນອາກອນກຳໄລ ຊຶ່ງຂຶ້ນກັບອັດຕາສ່ວນການສົ່ງອອກດັ່ງນີ້:

1. ການຜະລິດສົ່ງອອກໄປຕ່າງປະເທດ 70% ຂຶ້ນໄປຂອງຈຳນວນຜະລິດຕະພັນຂອງຕົນ ຫຼື ການປະກອບ ຫຼື ຜະລິດອຸປະກອນເຄື່ອງມື ແລະ ຜະລິດຕະພັນ ໄຮເທັກ(Hi-tech) (ຄຳນິຍາມ ແລະ ຕົວຢ່າງໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ) ແມ່ນຖືກຍົກເວັ້ນອາກອນກຳໄລ ໃນໄລຍະ 10 ປີ ເລີ່ມແຕ່ປີທີ່ໄດ້ກຳໄລ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 8%;
2. ການຜະລິດສົ່ງອອກໄປຕ່າງປະເທດ ແຕ່ 30%-69% ຂອງຈຳນວນຜະລິດຕະພັນຂອງຕົນ ແມ່ນ ຖືກຍົກເວັ້ນອາກອນກຳໄລໃນໄລຍະ 7 ປີ ເລີ່ມແຕ່ປີທີ່ໄດ້ກຳໄລ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 8%;
3. ການຜະລິດທົ່ວໄປ ຫຼື ສົ່ງອອກໄປຕ່າງປະເທດຕ່ຳກວ່າ 30% ຂອງຈຳນວນຜະລິດຕະພັນຂອງຕົນ ແມ່ນຖືກຍົກເວັ້ນອາກອນກຳໄລໃນໄລຍະ 5 ປີ ເລີ່ມແຕ່ປີທີ່ໄດ້ກຳໄລ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 8%;
4. ນອກຈາກນະໂຍບາຍທີ່ລະບຸໄວ້ເທິງນັ້ນແລ້ວ ສຳລັບການຜະລິດທີ່ນຳໃຊ້ວັດຖຸດິບພາຍໃນປະເທດ ສູງກວ່າ 50% ຂອງຈຳນວນວັດຖຸດິບທີ່ທຳການຜະລິດ ແລະ ປຸງແຕ່ງຈະໄດ້ຮັບສິດທິພິເສດເພີ່ມເຕີມ ໂດຍການເສຍອາກອນກຳໄລ 50% ຂອງອັດຕາທີ່ກ່າວມາເທິງນັ້ນ ໃນໄລຍະສອງປີທຳອິດທີ່ຕ້ອງເລີ່ມເສຍອາກອນກຳໄລ.

ຂ. ຂະແໜງການຄ້າ

ກິດຈະການການຄ້າ ແມ່ນການໃຊ້ວັດຖຸ, ສິນຄ້າ ແລະ ຜະລິດຕະພັນຕ່າງໆ ນຳອອກຂາຍຕາມສະພາບເດີມ ໂດຍບໍ່ໄດ້ມີການປຸງແຕ່ງ ຫຼື ອາດຈະມີພຽງການຫຸ້ມຫໍ່ ດັດແປງພຽງ ເລັກນ້ອຍ ເຊັ່ນ: ກິດຈະການການຄ້າ ຂາອອກ-ຂາເຂົ້າ, ການຄ້າຜ່ານແດນ, ຮ້ານຄ້າປອດພາສີ, ການຂາຍຍົກ ແລະ ອື່ນໆ.

1. ຜູ້ດຳເນີນການຄ້າເພື່ອສົ່ງສິນຄ້າໄປຂາຍຕ່າງປະເທດ ຊຶ່ງເປັນຜະລິດຕະພັນ ແລະ ສິນຄ້າພາຍໃນປະເທດ ລວມທັງສິນຄ້າທີ່ຜະລິດຢູ່ພາຍໃນ **ຂສສຊ** ຈະໄດ້ຮັບການຍົກເວັ້ນອາກອນກຳໄລ ໃນໄລຍະເວລາ 5 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ, ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລ ໃນອັດຕາ 10%;
2. ຜູ້ດຳເນີນການຄ້າທີ່ນຳສິນຄ້າມາຈາກຕ່າງປະເທດ ເພື່ອນຳສິນຄ້າດັ່ງກ່າວສົ່ງຂາຍຕໍ່ປະເທດທີ່ສາມຈະໄດ້ຮັບການຍົກເວັ້ນອາກອນກຳໄລ ໃນໄລຍະເວລາ 3 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ, ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລ ໃນອັດຕາ 10%;
3. ນອກຈາກທຸລະກິດທີ່ກ່າວມາຂ້າງເທິງນັ້ນ ທີ່ເຄື່ອນໄຫວໃນ **ຂສສຊ** ຈະໄດ້ຮັບການ

ຍົກເວັ້ນອາກອນກຳໄລໃນໄລຍະ 2 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ ຫຼັງຈາກນັ້ນຈະເສຍອາກອນກຳໄລໃນອັດຕາ 10%.

ຄ. ຂະແໜງບໍລິການ

ກິດຈະການບໍລິການແມ່ນການສະໜອງແຮງງານ ຫຼື ສະໜອງການບໍລິການໃຫ້ຜູ້ອື່ນດ້ວຍແຮງງານ ສະຕິປັນຍາ, ອຸປະກອນ, ເຄື່ອງຈັກ, ພາຫະນະ ແລະ ຊັບສິນຕ່າງໆ ໂດຍໄດ້ຮັບຄ່າບໍລິການ ເປັນສິ່ງຕອບແທນ ເຊັ່ນ: ກິດຈະການຂົນສົ່ງ, ກິດຈະການລະບົບສາງ, ການກໍ່ສ້າງໂຮງແຮມ, ການທ່ອງທ່ຽວ, ທະນາຄານ, ປະກັນໄພ, ມະຫາວິທະຍາໄລ, ກິດຈະການສາທາລະນະຕ່າງໆ ເຊັ່ນ: ສວນສະນຸກ, ບໍລິການສະຖານທີ່ທ່ອງທ່ຽວ ແລະ ການບໍລິການອື່ນໆ.

- ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບການບໍລິການພາຍໃນ **ຂສສຊ** ຈະໄດ້ຮັບນະໂຍບາຍ ຍົກເວັ້ນ ແລະ ຫຼຸດຜ່ອນອາກອນກຳໄລຕາມຈຳນວນມູນຄ່າຂອງການລົງທຶນດັ່ງນີ້:

1. ມູນຄ່າການລົງທຶນແຕ່ 50,000-149,999 ໂດລາ ຍົກເວັ້ນອາກອນກຳໄລ 2 ປີ ນັບແຕ່ປີທີ່ມີກຳໄລ ທຸລະກິດເປັນຕົ້ນໄປ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 10%;
2. ມູນຄ່າການລົງທຶນແຕ່ 150,000-299,999 ໂດລາ ຍົກເວັ້ນອາກອນກຳໄລ 4 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 10%;
3. ມູນຄ່າການລົງທຶນແຕ່ 300,000-499,999 ໂດລາ ຍົກເວັ້ນອາກອນກຳໄລ 6 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 10%;
4. ມູນຄ່າການລົງທຶນແຕ່ 500,000-1,999,999 ໂດລາ ຍົກເວັ້ນອາກອນກຳໄລ 8 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 8%;
5. ມູນຄ່າການລົງທຶນແຕ່ 2,000,000 ໂດລາ ຂຶ້ນໄປ ຍົກເວັ້ນອາກອນກຳໄລ 10 ປີ ນັບແຕ່ປີທີ່ມີກຳໄລເປັນຕົ້ນໄປ ຫຼັງຈາກນັ້ນຕ້ອງເສຍອາກອນກຳໄລໃນອັດຕາ 8%.

- ສຳລັບກິດຈະການໂຮງຮຽນວິຊາຊີບ, ໂຮງຮຽນລະບົບສາມັນສຶກສາ (ປະຖົມ, ມັດທະຍົມ) ແມ່ນຖືກຍົກເວັ້ນ ອາກອນກຳໄລ.

25.7 ອາກອນລາຍໄດ້ສ່ວນບຸກຄົນ: ນັກລົງທຶນທີ່ມີຕຳແໜ່ງງານໃນບໍລິສັດ, ພະນັກງານ, ວິຊາການ, ກຳມະກອນ ທີ່ເປັນລູກຈ້າງ ແລະ ຮັບເງິນເດືອນ, ເງິນບຳເນັດ, ຄ່າແຮງງານ ແລະ ອື່ນໆ ຊຶ່ງລວມກັນແລ້ວ ເອີ້ນວ່າລາຍໄດ້ສ່ວນບຸກຄົນນັ້ນ ຕ້ອງເສຍອາກອນລາຍໄດ້ສ່ວນບຸກຄົນດັ່ງນີ້:

- ຊາວຕ່າງປະເທດເສຍ ໃນອັດຕາ 5% ;
- ພົນລະເມືອງລາວ ແລະ ຊາວຕ່າງດ້າວທີ່ມີພູມລຳເນົາຖາວອນຢູ່ ສປປ ລາວ ເສຍໂດຍມີອັດຕາ

ຫຼຸດຜ່ອນພື້ນຖານ (ບໍ່ເກັບ) ສໍາລັບ 200,000 ກີບ ຕໍ່ເດືອນ ສ່ວນທີ່ລື່ນຈາກຈໍານວນນີ້ ຈຶ່ງຖືກຄິດໄລ່ໃນອັດຕາ 5%.

25.8 ອາກອນເງິນປັນຜົນ:

ພາຍຫຼັງໝົດກໍານົດໄລຍະການຍົກເວັ້ນອາກອນກໍາໄລ ທຸກວິສາຫະກິດປະສົມຂອງ **ຂສສຊ** (ທີ່ມີ ຂາຫຸ້ນ 2 ຂາຫຸ້ນຂຶ້ນໄປ) ຕ້ອງເສຍອາກອນ ເງິນປັນຜົນໃນອັດຕາ 5%.

25.9 ອາກອນຕໍ່າສຸດ: ທຸກວິສາຫະກິດຂອງ **ຂສສຊ** ຖືກຍົກເວັ້ນການເສຍອາກອນຕໍ່າສຸດ.

**ມາດຕາ 26 ນະໂຍບາຍດ້ານພາສີ**

26.1 ພາສີສິນຄ້າຂາເຂົ້າ **ຂສສຊ**:

ຜະລິດຕະພັນ ແລະ ສິນຄ້າທີ່ນໍາເຂົ້າ **ຂສສຊ** ຈະໄດ້ຖືກງົດເກັບ, ຍົກເວັ້ນ ແລະ ເສຍພາສີ ໃນອັດຕາພິເສດ ດັ່ງນີ້:

- ສໍາລັບການຜະລິດແມ່ນຖືກຍົກເວັ້ນການເສຍພາສີຂາເຂົ້າ ສໍາລັບວັດສະດຸກໍ່ສ້າງໂຮງງານ, ວັດຖຸດິບ, ວັດສະດຸ, ຜະລິດຕະພັນເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ທີ່ນໍາໃຊ້ໃນການປຸງແຕ່ງ, ປະກອບ ຫຼື ຜະລິດ, ເຄື່ອງຈັກ, ຍານພາຫະນະ ແລະ ອາໄຫຼ່ ຮັບໃຊ້ການຜະລິດ;
- ສໍາລັບການບໍລິການລະບົບສາງ ແມ່ນຖືກຍົກເວັ້ນການເສຍພາສີຂາເຂົ້າສໍາລັບວັດສະດຸກໍ່ສ້າງລະບົບສາງ, ເຄື່ອງຈັກ, ຍານພາຫະນະ ແລະ ອາໄຫຼ່ ຮັບໃຊ້ລະບົບສາງ ແລະ ສິ່ງອໍານວຍຄວາມສະດວກໃຫ້ແກ່ວຽກງານ ບໍລິການ ລະບົບສາງທີ່ຄົບຊຸດ;
- ສໍາລັບບໍລິສັດຂົນສົ່ງ (ຊຶ່ງມີຍານພາຫະນະບັນທຸກໜັກຂອງຕົນເອງ) ແມ່ນຖືກຍົກເວັ້ນການເສຍພາສີຂາເຂົ້າສໍາລັບ ຍານພາຫະນະ, ອາໄຫຼ່ຮັບໃຊ້ວຽກຮັບເໝົາການຂົນສົ່ງ ພ້ອມທັງອຸປະກອນ, ອາໄຫຼ່ສໍາລັບຍົກຖ່າຍສິນຄ້າ. ຖ້າມີການກໍ່ສ້າງອາຄານຂອງຕົນເອງ ກໍຈະຖືກຍົກເວັ້ນພາສີນໍາເຂົ້າວັດສະດຸກໍ່ສ້າງ;
- ສໍາລັບການບໍລິການຈັດສົ່ງ (ຊຶ່ງບໍ່ມີຍານພາຫະນະບັນທຸກໜັກຂອງຕົນເອງ) ແມ່ນຖືກຍົກເວັ້ນການເສຍພາສີນໍາເຂົ້າ ເຄື່ອງໃຊ້ທີ່ຈໍາເປັນ ແລະ ອຸປະກອນຫ້ອງການ ຕາມລາຍການທີ່ໄດ້ກໍານົດຢ່າງເໝາະສົມ. ຖ້າມີການກໍ່ສ້າງອາຄານຂອງຕົນເອງ ກໍຈະຖືກຍົກເວັ້ນພາສີນໍາເຂົ້າວັດສະດຸກໍ່ສ້າງ;
- ສໍາລັບກິດຈະການກໍ່ສ້າງໂຮງແຮມ, ການພັດທະນາແຫຼ່ງທ່ອງທ່ຽວ (ລວມທັງສະຖານທີ່ຫຼິ້ນກິລາ, ສວນສະນຸກ, ບ່ອນພັກຜ່ອນ) ໂຮງຮຽນ ແລະ ໂຮງໝໍ ແມ່ນຖືກຍົກເວັ້ນການເສຍພາສີຂາເຂົ້າສໍາລັບວັດສະດຸກໍ່ສ້າງ, ເຄື່ອງຈັກ, ລົດເມ (ຂະໜາດເກີນ 12 ບ່ອນນັ່ງ) ແລະ ອາໄຫຼ່ຮັບໃຊ້ ແລະ ສິ່ງອໍານວຍ ຄວາມສະດວກໃຫ້ແກ່ວຽກງານບໍລິການ ຕາມລາຍການທີ່ໄດ້ກໍານົດຢ່າງເໝາະສົມ;

• ສໍາລັບການບໍລິການຈັດທົວທ່ອງທ່ຽວ ແມ່ນຖືກຍົກເວັ້ນການເສຍພາສີນໍາເຂົ້າ ເຄື່ອງໃຊ້ທີ່ຈໍາເປັນ, ລົດເມ ຂະໜາດເກີນ 12 ບ່ອນນັ່ງ ແລະ ອຸປະກອນ ທ້ອງການຕາມລາຍການທີ່ໄດ້ກໍານົດຢ່າງເໝາະສົມ. ຖ້າມີການກໍ່ສ້າງອາຄານຂອງຕົນເອງ ກໍຈະຖືກຍົກເວັ້ນພາສີນໍາເຂົ້າວັດສະດຸກໍ່ສ້າງ;

• ສໍາລັບກິດຈະການຂາຍຍົກ, ຂາຍຍ່ອຍ ແລະ ການບໍລິການທົ່ວໄປ (ຊຶ່ງບໍ່ໄດ້ຈັດຢູ່ໃນກິດຈະການທີ່ໄດ້ກໍານົດໄວ້ໃນມາດຕານີ້) ແມ່ນຖືກຍົກເວັ້ນການເສຍພາສີນໍາເຂົ້າ ສໍາລັບສິນຄ້າທີ່ນໍາເຂົ້າເພື່ອສົ່ງອອກຕໍ່ (ສົ່ງອອກຄືນ), ເຄື່ອງໃຊ້ທີ່ຈໍາເປັນ ແລະ ອຸປະກອນຫ້ອງການຕາມລາຍການທີ່ໄດ້ກໍານົດຢ່າງເໝາະສົມ. ຖ້າມີການກໍ່ສ້າງອາຄານຂອງຕົນເອງ ກໍຈະຖືກຍົກເວັ້ນພາສີນໍາເຂົ້າວັດສະດຸກໍ່ສ້າງ;

• ສໍາລັບການພັດທະນາກໍ່ສ້າງ ນິຄົມອຸດສາຫະກໍາ, ໂຮງຈັກໂຮງງານ ເພື່ອໃຫ້ຜູ້ອື່ນເຊົ່າ ແລະ ເຮືອນພັກອາໃສ (ເປັນຕົ້ນຄື ຊຸດອາຄານໃຫ້ເຊົ່າ, ບ້ານຈັດສັນ) ແມ່ນຖືກຍົກເວັ້ນການເສຍພາສີຂາເຂົ້າ ສໍາລັບ ວັດສະດຸກໍ່ສ້າງ, ເຄື່ອງຈັກ, ຍານພາຫະນະ, ອາໄຫຼ່ ຮັບໃຊ້ການກໍ່ສ້າງ ແລະ ບໍລິການ ແລະ ສິ່ງອໍານວຍຄວາມສະດວກໃຫ້ແກ່ວຽກງານ.

26.2 ພາສີຂາເຂົ້າລົດຮັບໃຊ້ວຽກບໍລິຫານ ຫຼື ຮັບໃຊ້ການຜະລິດທາງອ້ອມພາຍໃນ **ຂສສຊ:**

- ສໍາລັບລົດເກງ, ລົດກະບະ, ລົດຕູ້ນ້ອຍ (12 ບ່ອນນັ່ງລົງມາ), ລົດຈິບ ເພື່ອຮັບໃຊ້ວຽກບໍລິຫານຂອງວິສາຫະກິດ ຫຼື ຮັບໃຊ້ການຜະລິດໂດຍທາງອ້ອມ ຂອງ **ຂສສຊ** ຕ້ອງເສຍພາສີນໍາເຂົ້າໃນອັດຕາ 1%, ຊຶ່ງ ຄະນະບໍລິຫານ **ຂສສຊ** ຈະເປັນຜູ້ອະນຸຍາດໃຫ້ນໍາເຂົ້າໃນຈໍານວນທີ່ຂຶ້ນກັບທຶນຈົດທະບຽນຕໍ່າສຸດ ດັ່ງນີ້:

| ທຶນຈົດທະບຽນ : | ຈໍານວນລົດ: |
|---|---|
| 100,000-499,999 ໂດລາ | 1 ຄັນ |
| 500,000-999,999 ໂດລາ | 2 ຄັນ (ໂດຍອີງຕາມຄວາມເໝາະສົມ ແລະ ຕາມບົດສະເໜີໂຄງການ) |
| 1,000,000 ໂດລາ ຂຶ້ນໄປ | 3 ຄັນ (ໂດຍອີງຕາມຄວາມເໝາະສົມ ແລະ ຕາມບົດສະເໜີໂຄງການ) |

- ຖ້າຫາກຜູ້ລົງທຶນໃນ **ຂສສຊ** ຕ້ອງການນໍາໃຊ້ລົດຮັບໃຊ້ວຽກບໍລິຫານຫຼາຍກວ່າຈໍານວນທີ່ໄດ້ກໍານົດໄວ້ເທິງນັ້ນ ຄະນະບໍລິຫານ **ຂສສຊ** ຈະອະນຸຍາດໃຫ້ນໍາເຂົ້າ ໂດຍຕ້ອງໄດ້ເສຍພາສີຂາເຂົ້າຕາມກົດໝາຍພາສີ ແຫ່ງ ສປປ ລາວ.

26.3 ນະໂຍບາຍການນຳຍານພາຫະນະເຂົ້າ **ຂສສຊ** ຊົ່ວຄາວ:

ວິສາຫະກິດ ຂອງ **ຂສສຊ** (ລວມທັງຫ້ອງການຜູ້ຕາງໜ້າ) ທີ່ມີກິດຈະການກໍ່ສ້າງ, ການສຳຫຼວດ ຫຼື ກິດຈະການອື່ນໆ ຫຼື ມີສັນຍາຮັບເໝົາວຽກໃດໜຶ່ງພາຍໃນ **ຂສສຊ** ທີ່ມີຄວາມຈຳເປັນຕ້ອງນຳເຄື່ອງມືອຸປະກອນຮັບໃຊ້, ກົນຈັກໜັກ, ຍານພາຫະນະ ທີ່ຮັບໃຊ້ການດຳເນີນງານ ຕາມທີ່ໄດ້ລະບຸໄວ້ໃນ ບົດສະເໜີໂຄງການ, ບົດວິພາກເສດຖະກິດ-ເຕັກນິກໂຄງການລົງທຶນ ຫຼື ສັນຍາຮັບເໝົາວຽກໃນ **ຂສສຊ**, ຄະນະບໍລິຫານ **ຂສສຊ** ຈະອະນຸຍາດໃຫ້ນຳພາຫະນະເຫຼົ່ານີ້ເຂົ້າມາຊົ່ວຄາວໂດຍຍົກເວັ້ນການເກັບພາສີນຳເຂົ້າພາຍໃນກຳນົດເວລາ 01 ປີ. ໃນກໍລະນີທີ່ມີຄວາມຈຳເປັນນຳໃຊ້ເກີນເວລາ 01 ປີ ນັ້ນ ຄະນະບໍລິຫານ **ຂສສຊ** ຈະພິຈາລະນາຕໍ່ອາຍຸການນຳໃຊ້ພາຫະນະນັ້ນຕື່ມອີກຕາມການສະເໜີຂອງວິສາຫະກິດຂອງ **ຂສສຊ** ແຕ່ການຕໍ່ອາຍຸຕື່ມນັ້ນ ສູງສຸດ ແມ່ນບໍ່ເກີນ 01 ປີ. ພາຍຫຼັງໝົດກຳນົດເວລາອະນຸຍາດນຳພາຫະນະເຂົ້າ **ຂສສຊ** ຊົ່ວຄາວນັ້ນແລ້ວ ພາຫະນະເຫຼົ່ານັ້ນ ຈະຕ້ອງຖືກສົ່ງອອກຈາກ **ຂສສຊ** ກໍຄື ສປປ ລາວ ທັນທີ.

26.4 ນະໂຍບາຍການຂາຍ ແລະ ນຳຍານພາຫະນະເຂົ້າມາທົດແທນ:

- ຄະນະບໍລິຫານ **ຂສສຊ** ຈະອະນຸຍາດໃຫ້ວິສາຫະກິດລົງທຶນໃນ **ຂສສຊ** ຂາຍຍານພາຫະນະ, ເຄື່ອງກົນຈັກໜັກ, ລົດບັນທຸກໜັກ ທີ່ນຳເຂົ້າ ມາຮັບໃຊ້ຊຶ່ງມີອາຍຸການນຳເຂົ້າແຕ່ 65 ປີ ຂຶ້ນໄປ ຫຼື ມີການເປ່ເພ ເສຍຫາຍຈົນໃຊ້ການບໍ່ໄດ້ ໂດຍຕ້ອງມີການຢັ້ງຢືນທາງດ້ານເຕັກນິກຈາກເຈົ້າໜ້າທີ່ ຫຼື ໜ່ວຍງານທີ່ໄດ້ຮັບການມອບໝາຍຈາກ ຄະນະບໍລິຫານ **ຂສສຊ**. ຖ້າເປັນການຂາຍພາຍໃນ **ຂສສຊ** ແມ່ນຖືກຍົກເວັ້ນພາສີອາກອນ ທຸກຢ່າງ, ແຕ່ຖ້າຂາຍອອກນອກ **ຂສສຊ** ພາຍໃນ ສປປ ລາວ ແມ່ນຕ້ອງເສຍພາສີ-ອາກອນຢ່າງຄົບຖ້ວນ ຕາມລະບຽບການຕາມມູນຄ່າການຕີລາຄາໃນມື້ຂາຍ. ຈາກນັ້ນ ຖ້າວິສາຫະກິດນັ້ນຫາກຕ້ອງການນຳຍານ ພາຫະນະເຂົ້າມາທົດແທນຄັນທີ່ໄດ້ຂາຍແລ້ວນັ້ນ ຄະນະບໍລິຫານ **ຂສສຊ** ຈະອະນຸຍາດໃຫ້ ຕາມນະໂຍບາຍທີ່ໄດ້ກຳນົດໄວ້ໃນ ມາດຕາ 26.1 ຫຼື 26.2 ເທິງນັ້ນ.

26.5 ຂໍ້ຫ້າມກ່ຽວກັບຍານພາຫະນະ:

- ຫ້າມເອົາ ຍານພາຫະນະ, ເຄື່ອງກົນຈັກໜັກ ແລະ ລົດບັນທຸກໜັກ ທີ່ໄດ້ນຳເຂົ້າມາ **ຂສສຊ** ຕາມນະໂຍບາຍຍົກເວັ້ນພາສີນຳເຂົ້າທີ່ໄດ້ລະບຸໃນ ມາດຕາ 26.1 ຫຼື 26.2 ເທິງນັ້ນ ໄປແລກປ່ຽນ, ຊື້-ຂາຍ ຫຼື ມອບໂອນກຳມະສິດໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄະນະບໍລິຫານ **ຂສສຊ.**

26.6 ຜະລິດຕະພັນຈາກ **ຂສສຊ** ສົ່ງອອກຕ່າງປະເທດ:

- ທຸກຜະລິດຕະພັນ ແລະ ສິນຄ້າສົ່ງອອກ ຈາກ **ຂສສຊ** ໄປສູ່ຕ່າງປະເທດໄດ້ຮັບການຍົກເວັ້ນ

ພາສີຂາອອກ (ລວມທັງ ຄ່າຊັກພິເສດ).

26.7 ຜະລິດຕະພັນຈາກ **ຂສສຊ** ສົ່ງຈຳໜ່າຍພາຍໃນປະເທດ:

- ຜະລິດຕະພັນພາຍໃນ **ຂສສຊ** ເມື່ອໄດ້ຮັບອະນຸຍາດໃຫ້ສົ່ງອອກຈາກພື້ນທີ່ຂອງ **ຂສສຊ** ເພື່ອນຳເຂົ້າສູ່ຕະຫຼາດພາຍໃນປະເທດ ສປປ ລາວ ຕ້ອງ ເສຍພາສີຂາເຂົ້າປະເທດສຳລັບສະເພາະແຕ່ວັດຖຸດິບ ຫຼື ຜະລິດຕະພັນເຄິ່ງສຳເລັດຮູບ ທີ່ມີຢູ່ໃນປະເທດ ແຕ່ຍັງຂໍນຳເຂົ້າມາທຳການຜະລິດ ໂດຍໄດ້ຮັບອະນຸຍາດ ແລະ ຢັ້ງຢືນຈາກ ຄະນະບໍລິຫານ **ຂສສຊ** ຫຼື ພາກສ່ວນທີ່ກ່ຽວຂ້ອງ ໃນອັດຕາພາສີຕາມທີ່ໄດ້ກຳນົດໄວ້ໃນປຶ້ມສາລະບານອັດຕາພາສີ ຂອງ ກົດໝາຍພາສີ. ສ່ວນສຳລັບຜະລິດຕະພັນພາຍໃນ **ຂສສຊ** ທີ່ໄດ້ຮັບອະນຸຍາດໃຫ້ສົ່ງອອກຈາກພື້ນທີ່ຂອງ **ຂສສຊ** ເພື່ອນຳເຂົ້າສູ່ຕະຫຼາດພາຍໃນປະເທດ ຊຶ່ງໄດ້ນຳໃຊ້ວັດຖຸດິບ ຫຼື ຜະລິດຕະພັນເຄິ່ງສຳເລັດຮູບຂອງພາຍໃນປະເທດ ຫຼື ເປັນວັດຖຸດິບ ຫຼື ຜະລິດຕະພັນເຄິ່ງສຳເລັດຮູບທີ່ບໍ່ມີໃນປະເທດ ແລະ ໄດ້ຮັບການຢັ້ງຢືນຈາກ ຄະນະບໍລິຫານ **ຂສສຊ** ຫຼື ພາກສ່ວນທີ່ກ່ຽວຂ້ອງ ໃຫ້ນຳເຂົ້າມາຈາກຕ່າງປະເທດ ເພື່ອມາຜະລິດ ຫຼື ປະກອບເປັນຜະລິດຕະພັນເຫຼົ່ານັ້ນ ແມ່ນຖືກຍົກເວັ້ນການເສຍພາສີຂາເຂົ້າປະເທດ.

- ສຳລັບສິນຄ້ານຳເຂົ້າຈາກຕ່າງປະເທດ ມາສູ່ **ຂສສຊ** ແລະ ໄດ້ຮັບອະນຸຍາດໃຫ້ສົ່ງຕໍ່ອອກຈາກພື້ນທີ່ **ຂສສຊ** ເພື່ອເຂົ້າສູ່ຕະຫຼາດພາຍໃນປະເທດ ສປປ ລາວ ຕ້ອງເສຍພາສີຂາເຂົ້າຕາມອັດຕາປົກກະຕິຂອງ ກົດໝາຍພາສີ ທີ່ມີຜົນບັງຄັບໃຊ້ຢູ່ປະຈຸບັນ.

**ມາດຕາ 27 ການນຳໃຊ້ກຳໄລເພື່ອລົງທຶນ**

ບັນດາຫົວໜ່ວຍທຸລະກິດ ຂອງ **ຂສສຊ** ທີ່ນຳໃຊ້ກຳໄລທີ່ຕົນໄດ້ຮັບໃນແຕ່ລະປີເພື່ອລົງທຶນເຂົ້າໃສ່ກິດຈະການໃດໜຶ່ງໃນ **ຂສສຊ**, ພາຍຫຼັງທີ່ຖືກກວດສອບ ແລະ ຮັບຮູ້ໂດຍໜ່ວຍງານທີ່ກ່ຽວຂ້ອງ ທີ່ຖືກມອບໝາຍຈາກ ຄະນະບໍລິຫານ **ຂສສຊ** ແລ້ວ, ຫົວໜ່ວຍທຸລະກິດນັ້ນ ຈະໄດ້ຮັບການຫຼຸດຜ່ອນອາກອນກຳໄລຕາມອັດຕາສ່ວນຂອງຈຳນວນທຶນທີ່ລົງທຶນເພີ່ມໃນປີນັ້ນ.

**ມາດຕາ 28 ນະໂຍບາຍການຍົກຂາດທຶນປະຈຳປີໄປຫັກອອກໃນປີຕໍ່ໄປ**

ພາຍຫຼັງສິ້ນສຸດໄລຍະຂອງການຍົກເວັ້ນ ການເສຍອາກອນກຳໄລຕາມ ມາດຕາ 25 ຂອງດຳລັດສະບັບນີ້ ຖ້າຫົວໜ່ວຍທຸລະກິດໃດໜຶ່ງໃນ **ຂສສຊ** ຫາກຂາດທຶນ, ພາຍຫຼັງທີ່ຖືກກວດສອບ ແລະ ຮັບຮູ້ໂດຍໜ່ວຍງານທີ່ກ່ຽວຂ້ອງ ທີ່ຖືກມອບໝາຍຈາກ ຄະນະບໍລິຫານ **ຂສສຊ** ແລ້ວ, ຫົວໜ່ວຍທຸລະກິດນັ້ນ ຈະມີສິດຍົກຂາດທຶນດັ່ງກ່າວ ໄປຫັກອອກ ຈາກກຳໄລຂອງປີຖັດຕໍ່ໄປ, ແຕ່ການປະຕິບັດນະໂຍບາຍຊ່ວຍເຫຼືອຫົວໜ່ວຍທຸລະກິດ ທີ່ຂາດທຶນນີ້ ແມ່ນບໍ່ໃຫ້ເກີນ 5 ປີ ນັບແຕ່ປີທຳອິດທີ່ມີການຂາດທຶນເກີດຂຶ້ນ.

**ມາດຕາ 29 ອາຍຸການໃຫ້ເຊົ່າທີ່ດິນ**

ຜູ້ລົງທຶນໃນ **ຂສສຊ** ສາມາດ ເຊົ່າທີ່ດິນໄດ້ພາຍໃນກຳນົດໄລຍະເວລາສູງສຸດ 75 ປີ, ຊຶ່ງໄລຍະ

ນັ້ນຕ້ອງເທົ່າກັບ ໄລຍະຂໍອະນຸຍາດລົງທຶນ ຫຼື ເທົ່າກັບໄລະຍະທີ່ຍັງເຫຼືອຈາກການອະນຸຍາດລົງທຶນ ແລະ ສາມາດຕໍ່ອາຍຸໄດ້ ຕາມການພິຈາລະນາເຫັນດີ ຂອງ ຄະນະບໍລິຫານ **ຂສສຊ,** ແຕ່ການສະເໜີຂໍຕໍ່ອາຍຸເຊົ່າທີ່ດິນ ຈະຕ້ອງສະເໜີຕໍ່ ຄະນະບໍລິຫານ **ຂສສຊ** ເປັນເວລາຢ່າງຊ້າ 06 ເດືອນກ່ອນວັນໝົດອາຍຸການເຊົ່າ.

- ຄະນະບໍລິຫານ **ຂສສຊ** ຈະອອກຂໍ້ກໍານົດຕ່າງຫາກກ່ຽວກັບລະບຽບການ, ເງື່ອນໄຂ, ມາດຕະຖານ ແລະ ກໍານົດໄລຍະການເຊົ່າທີ່ດິນ ຕາມແຕ່ລະຂະແໜງການລົງທຶນ.

## ມາດຕາ 30 ນະໂຍບາຍເສຍຄ່າເຊົ່າທີ່ດິນ

- ຜູ້ລົງທຶນ ໃນ **ຂສສຊ** ທີ່ເຊົ່າທີ່ດິນເປັນໄລຍະເວລາ 30 ປີ ຂຶ້ນໄປຈະໄດ້ຮັບການຍົກເວັ້ນຄ່າເຊົ່າທີ່ດິນພາຍໃນ **ຂສສຊ** ເປັນເວລາ 12 ປີ ຕາມ ອັດຕາຄ່າເຊົ່າທີ່ ຄະນະບໍລິຫານ **ຂສສຊ** ກໍານົດອອກສະເພາະສໍາລັບ **ຂສສຊ.**

- ຜູ້ລົງທຶນໃນ **ຂສສຊ** ສາມາດເສຍຄ່າເຊົ່າທີ່ດິນໄດ້ໂດຍມີທາງເລືອກ ດັ່ງນີ້:
  - ຈ່າຍຄ່າເຊົ່າຂອງໄລຍະເວລາເຊົ່າທີ່ດິນທັງໝົດຄົບເທື່ອດຽວ ໃນມື້ໄດ້ຮັບໃບອະນຸຍາດນໍາໃຊ້ທີ່ດິນ (ໂດຍ ຫັກເວລາ 12 ປີ ອອກຈາກຈໍານວນຂໍເຊົ່າທັງໝົດໃນກໍລະນີຂໍເຊົ່າເປັນໄລຍະເວລາ 30 ປີຂຶ້ນໄປ); ຫຼື
  - ຈ່າຍກ່ອນ 50% ຂອງຄ່າເຊົ່າທັງໝົດໃນມື້ໄດ້ຮັບໃບອະນຸຍາດນໍາໃຊ້ທີ່ດິນຕາມວັກຂ້າງເທິງນັ້ນ, ຈາກນັ້ນຕ້ອງຈ່າຍສ່ວນທີ່ຍັງເຫຼືອໃຫ້ຄົບພາຍໃນ 6 ປີ ຄືຈ່າຍ 6 ເດືອນເທື່ອໜຶ່ງ ໂດຍແບ່ງປັນຄ່າຈ່າຍເປັນຈໍານວນເທົ່າກັນ ຊຶ່ງເປັນຈໍານວນ ທັງໝົດ 12 ງວດ ແລະ ຄິດໄລ່ດອກເບ້ຍຂອງຈໍານວນເງິນຄ້າງຈ່າຍ ໃນອັດຕາ 6% ຕໍ່ປີ; ຫຼື
  - ວິທີການອື່ນຕາມລະບຽບການລະອຽດທີ່ ຄະນະບໍລິຫານ **ຂສສຊ** (ຫຼື ວິສາຫະກິດພັດທະນາໂຄງລ່າງ **ຂສສຊ)** ກໍານົດອອກຕ່າງຫາກ ແລະ ຕາມການຕົກລົງເຫັນດີລະຫວ່າງຜູ້ຂໍເຊົ່າ ແລະ ຜູ້ໃຫ້ເຊົ່າທີ່ດິນ.

- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ທີ່ນໍາໃຊ້ທີ່ດິນເປັນບ່ອນຢູ່ອາໃສ ຫຼື ດໍາເນີນທຸລະກິດຕ່າງໆ ຢູ່ໃນ **ຂສສຊ** ຖືກຍົກເວັ້ນພາສີທີ່ດິນຕາມລະບຽບກົດໝາຍຂອງ ສປປ ລາວ.

## ມາດຕາ 31 ການສົ່ງກໍາໄລຄືນປະເທດ

ຜູ້ລົງທຶນຕ່າງປະເທດ ທີ່ເນີນທຸລະກິດ ແລະ ຄົນຕ່າງປະເທດທີ່ເຮັດວຽກຢູ່ **ຂສສຊ** ສາມາດສົ່ງກໍາໄລ ແລະ ລາຍໄດ້ຂອງຕົນກັບຄືນປະເທດຕົນ ຫຼື ປະເທດທີ່ສາມໄດ້ ໂດຍຜ່ານທະນາຄານທີ່ຕັ້ງຢູ່ **ຂສສຊ** ຫຼື ຢູ່ ສປປ ລາວ ພາຍຫຼັງທີ່ໄດ້ປະຕິບັດພັນທະທາງດ້ານພາສີ-ອາກອນຄົບຖ້ວນແລ້ວ.

## ໝວດທີ IV
## ວ່າດ້ວຍ ການສົ່ງອອກ, ການນຳເຂົ້າ, ການສົ່ງອອກຕໍ່ ແລະ ການເຄື່ອນຍ້າຍຜ່ານແດນ

### ມາດຕາ 32 ການສົ່ງອອກ ແລະ ການນຳເຂົ້າ

- ທຸກປະເພດສິນຄ້າ, ອຸປະກອນ, ພາຫະນະຂົນສົ່ງ ຫຼື ພາຫະນະການຜະລິດ ລວມທັງເຄື່ອງຕິດຕົວເຂົ້າ ຫຼື ອອກຈາກ **ຂສສຊ** ຈະຖືກຜ່ອນຜັນການກວດກາ ຫຼື ກວດກາຕາມລະບຽບການ ໂດຍໜ່ວຍງານ ທີ່ກ່ຽວຂ້ອງຊຶ່ງຖືກ ມອບໝາຍ ຈາກ ຄະນະບໍລິຫານ **ຂສສຊ.**

- ທຸກຫົວໜ່ວຍທຸລະກິດຂອງ **ຂສສຊ** ສາມາດນຳເຂົ້າ ຫຼື ສົ່ງອອກທຸກປະເພດສິນຄ້າ ເຄື່ອງຂອງທີ່ກ່ຽວຂ້ອງກັບກິດຈະການຂອງຕົນ, ເວັ້ນເສຍແຕ່ປະເພດສິນຄ້າທີ່ລັດເກືອດຫ້າມ.

- ຫ້າມບໍ່ໃຫ້ ຜູ້ໃດເອົາຂອງໃນ **ຂສສຊ** (ໂດຍສະເພາະແມ່ນຈາກເຂດອຸດສະຫະກຳ ແລະ ການປຸງແຕ່ງ ເພື່ອສົ່ງອອກ) ອອກຈາກ **ຂສສຊ** ນອກຈາກວ່າໄດ້ຮັບອະນຸຍາດຈາກ ຄະນະບໍລິຫານ **ຂສສຊ** ຫຼື ນອກຈາກວ່າ ເປັນສິນຄ້າທີ່ຊື້ພາຍໃນສູນການຄ້າ, ສູນຂາຍຍົກ ຫຼື ຂາຍຍ່ອຍ ຢູ່ໃນ ເຂດການຄ້າ ຫຼື ງານຕະຫຼາດນັດ ຂອງ **ຂສສຊ.**

### ມາດຕາ 33 ການຂາຍສິນຄ້າເຂົ້າຕະຫຼາດພາຍໃນຂອງ ສປປ ລາວ

ການຂາຍສິນຄ້າເຂົ້າສູ່ຕະຫຼາດພາຍໃນຂອງ ສປປ ລາວ ຈະສາມາດປະຕິບັດໄດ້ກໍຕໍ່ເມື່ອ:

33.1 ເປັນການຂາຍສິນຄ້າປະເພດເຄື່ອງຈັກ ອຸປະກອນ, ແລະ ພາຫະນະການຜະລິດຕ່າງໆ ທີ່ບັນດາຫົວໜ່ວຍທຸລະກິດ ຂອງ **ຂສສຊ** ຊື້ຈາກຕະຫຼາດຕ່າງປະເທດ ເຂົ້າມາຮັບໃຊ້ໃນກິດຈະການຂອງຕົນໃນ **ຂສສຊ** ພາຍຫຼັງ ສິ້ນສຸດອາຍຸໂຄງການ ຫຼື ນຳໃຊ້ບໍ່ໝົດ ຫຼື ເຫດຜົນອື່ນ ຊຶ່ງ ຄະນະບໍລິຫານ **ຂສສຊ** ໄດ້ພິຈາລະນາ ແລະ ເຫັນດີໃຫ້ຕີລາຄາເສຍພາສີ;

33.2 ເປັນການຂາຍເຄື່ອງເສດເຫຼືອ ຫຼື ເຄື່ອງເຊື່ອມມູນຄ່າ ແຕ່ຍັງມີລາຄາຂອງບັນດາຫົວໜ່ວຍທຸລະກິດ ທີ່ນຳໃຊ້ໃນກິດຈະການຂອງຕົນ ຢູ່ໃນ **ຂສສຊ.**

33.3 ເປັນການຂາຍສິນຄ້າປະເພດຕ່າງໆ ນອກຈາກທີ່ກ່າວມາຂ້າງເທິງນີ້ ໂດຍໃຫ້ຂໍອະນຸຍາດຈາກ ຄະນະບໍລິຫານ **ຂສສຊ** ກ່ອນການຂາຍເຂົ້າຕະຫຼາດພາຍໃນ, ໃນກໍລະນີຫາກໄດ້ຮັບອະນຸຍາດແມ່ນໃຫ້ປະຕິບັດຕາມລະບຽບການເສຍພາສີອາກອນທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍຂອງ ສປປ ລາວ ທີ່ກ່ຽວຂ້ອງ;

### ມາດຕາ 34 ການສົ່ງອອກຕໍ່

ຜະລິດຕະພັນສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ ຫຼື ຊື້ຈາກຕະຫຼາດພາຍໃນຂອງ ສປປ ລາວ ເຂົ້າໄປໃນ **ຂສສຊ** ສາມາດຂາຍອອກຕໍ່ໄປຍັງປະເທດທີ່ສາມໄດ້.

**ມາດຕາ 35 ການທຳລາຍສິນຄ້າໃນ ຂສສຊ**

ໃນກໍລະນີທີ່ວິສາຫະກິດ ທີ່ລົງທຶນຢູ່ໃນ **ຂສສຊ** ຫາກມີຜະລິດຕະພັນ ຫຼື ສິນຄ້າ ຢູ່ໃນ **ຂສສຊ** ທີ່ບໍ່ໃຊ້ ຫຼື ໃຊ້ບໍ່ໄດ້ ແລະ ໄດ້ເຮັດໜັງສືຂໍອະນຸຍາດທຳລາຍຜະລິດຕະພັນດັ່ງກ່າວ ຕໍ່ ຄະນະບໍລິຫານ **ຂສສຊ** ຫຼື ໃນກໍລະນີທີ່ ຄະນະບໍລິຫານ **ຂສສຊ** ຫາກເຫັນສົມຄວນສັ່ງໃຫ້ວິສາຫະກິດນັ້ນ ທຳລາຍສິນຄ້າດັ່ງກ່າວ ແລະ ໄດ້ເຮັດຈົດໝາຍຄຳສັ່ງ ເຖິງ ວິສາຫະກິດ ດັ່ງກ່າວ ແລ້ວ ຄະນະບໍລິຫານ **ຂສສຊ** ຕ້ອງແຕ່ງໜ່ວຍງານທີ່ຖືກມອບໝາຍວຽກໃຫ້ຈັດຕັ້ງ ແລະ ດຳເນີນການທຳລາຍສິນຄ້າເຫຼົ່ານັ້ນ ຕາມຫຼັກການ ແລະ ວິທີການທີ່ຈະກຳນົດອອກຕ່າງຫາກ. ສິນຄ້າ ຫຼື ຜະລິດຕະພັນທີ່ຖືກທຳລາຍຕາມວິທີ ແລະ ຫຼັກການດັ່ງກ່າວ ຈະໄດ້ຮັບການຍົກເວັ້ນ ຫຼື ທົດແທນຄືນ ຄ່າທຳນຽມ, ພາສີອາກອນຕ່າງໆ ທີ່ກ່ຽວຂ້ອງ ຊຶ່ງໄດ້ຈ່າຍໄປແລ້ວ.

**ມາດຕາ 36 ປະເພດສິນຄ້າເຄື່ອງຂອງທີ່ເກືອດຫ້າມ**

- ທຸກປະເພດສິນຄ້າເຄື່ອງຂອງ ທີ່ລັດຖະບານ ສປປ ລາວ ຫ້າມນຳເຂົ້າ, ສົ່ງອອກ, ຜະລິດ, ປຸງແຕ່ງ ຫຼື ຈໍລະຈອນພາຍໃນປະເທດ ລ້ວນແຕ່ມີຜົນບັງຄັບໃຊ້ປະຕິບັດ ຢູ່ໃນ **ຂສສຊ.**

## ໝວດທີ V
## ວ່າດ້ວຍ ການຄຸ້ມຄອງຄົນ ເຂົ້າ ແລະ ອອກ ຂສສຊ

**ມາດຕາ 37 ການເຂົ້າ-ອອກເຂດ**

ການເຂົ້າ-ອອກ **ຂສສຊ** ແມ່ນໃຫ້ຜ່ານດ່ານປະຕູທີ່ກຳນົດໃຫ້ສະເພາະເທົ່ານັ້ນ, ຄະນະບໍລິຫານ **ຂສສຊ** ຈະເປັນຜູ້ກຳນົດລະບຽບການລະອຽດກ່ຽວກັບການຄຸ້ມຄອງຄົນເຂົ້າ-ອອກເຂດຕ່າງຫາກ.

**ມາດຕາ 38 ການເຂົ້າ-ອອກ, ການພັກເຊົາ ຂອງຜູ້ລົງທຶນຕ່າງປະເທດ ແລະ ພະນັກງານ, ກຳມະກອນ.**

ຜູ້ລົງທຶນຕ່າງປະເທດ ລວມທັງພະນັກງານ, ກຳມະກອນ ລາວ ແລະ ຕ່າງປະເທດ ທີ່ເຮັດວຽກໃນ **ຂສສຊ** ສາມາດ ເຂົ້າ-ອອກ **ຂສສຊ** ໄດ້ຢ່າງເປັນປົກກະຕິ ໂດຍສະແດງບັດຜ່ານປະຕູ ຫຼື ໃບອະນຸຍາດ ຊຶ່ງອອກໃຫ້ໂດຍໜ່ວຍງານ ທີ່ກ່ຽວຂ້ອງທີ່ຖືກມອບໝາຍຈາກ ຄະນະບໍລິຫານ **ຂສສຊ**. ສຳລັບການພັກເຊົາຊົ່ວຄາວ ຫຼື ຍາວນານຢູ່ໃນ **ຂສສຊ** ນັ້ນ ຄະນະບໍລິຫານ **ຂສສຊ** ຈະເປັນຜູ້ວາງລະບຽບການລະອຽດອອກ.

**ມາດຕາ 39 ການເຂົ້າ-ອອກ ຂອງຄົນທົ່ວໄປ**

ການເຂົ້າ-ອອກ **ຂສສຊ** ຂອງຄົນທົ່ວໄປທີ່ບໍ່ແມ່ນຜູ້ລົງທຶນ ຫຼື ພະນັກງານ ຂອງ **ຂສສຊ** ຈະໄດ້ຮັບການພິຈາລະນາ ອະນຸຍາດໂດຍໜ່ວຍງານທີ່ໄດ້ຮັບການມອບໝາຍຈາກ ຄະນະບໍລິຫານ **ຂສສຊ** ແລະ ຕາມລະບຽບການທີ່ ຄະນະ ນີ້ຈະໄດ້ກຳນົດອອກຕ່າງຫາກ.

**ມາດຕາ 40 ການອອກບັດປະຈຳຕົວຄົນຕ່າງປະເທດ ແລະ ບັດແຮງງານຂອງຄົນຕ່າງປະເທດ**

- ຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບໃບອະນຸຍາດລົງທຶນໃນ **ຂສສຊ** ແລ້ວ (ຊຶ່ງມີທຶນຈົດທະບຽນ ໜຶ່ງແສນໂດລາສະຫະລັດຂຶ້ນໄປ) ພ້ອມທັງພັນລະຍາ ແລະ ລູກ (ທີ່ມີອາຍຸຕ່ຳກວ່າ 21 ປີ) ຂອງຜູ້ລົງທຶນນັ້ນ ຈະໄດ້ອະພິສິດ ແລະ ຄວາມສະດວກກ່ຽວກັບການ ຮັບບັດປະຈຳຕົວຄົນຕ່າງປະເທດທີ່ສາມາດອາໃສຢູ່ ສປປ ລາວ ໄດ້ເປັນເວລາຢ່າງໜ້ອຍ 01 ປີ ຂຶ້ນໄປ, ຮັບຄວາມສະດວກ ໃນການເຂົ້າ-ອອກ ສປປ ລາວ ໂດຍໄດ້ວີຊາເຂົ້າ-ອອກປະເທດຫຼາຍເທື່ອ ໃນກຳນົດເວລາຢ່າງໜ້ອຍ 01 ປີ ຊຶ່ງສາມາດຕໍ່ອາຍຸໄດ້ເມື່ອໃດຕ້ອງການ.

- ນັກບໍລິຫານ, ພະນັກງານ, ວິຊາການ ຊາວຕ່າງປະເທດຂອງ **ຂສສຊ** ຈະໄດ້ອະພິສິດໃນການຮັບບັດອອກແຮງງານ ຢູ່ ສປປ ລາວ ທີ່ມີອາຍຸການຢ່າງໜ້ອຍ ໜຶ່ງປີ, ຊຶ່ງຈະສາມາດຖືກຕໍ່ອາຍຸໃຫ້ໄດ້ຢ່າງສະດວກສະບາຍ ຕາມລະບຽບການ ຄະນະບໍລິຫານ **ຂສສຊ** ຈະກຳນົດອອກຕ່າງຫາກ.

- ສຳລັບນັກລົງທຶນຕ່າງປະເທດ ຂອງ **ຂສສຊ** ທີ່ມີທຶນຈົດທະບຽນການລົງທຶນ 10 ລ້ານ ໂດລາຂຶ້ນໄປ ຄະນະບໍລິຫານ **ຂສສຊ** ຈະປະສານງານກັບ ກະຊວງການຕ່າງປະເທດ ເພື່ອຂໍໃຫ້ອອກບັດຄົນຕ່າງດ້າວ ຫຼື ວີຊາເຂົ້າອອກ ຫຼາຍເທື່ອໃນໄລຍະຍາວກວ່າ 01 ປີ ຂຶ້ນໄປ ຫຼື ອອກບັດຜ່ານແດນລາວໃຫ້ ຊຶ່ງແລ້ວ ແຕ່ຄວາມເໝາະສົມ ຂອງກໍລະນີ ແລະ ການສະເໜີຂອງຜູ້ກ່ຽວ ທັງນີ້ກໍເພື່ອອຳນວຍຄວາມສະດວກແກ່ການດຳລົງຊີວິດ, ການດຳເນີນທຸລະກິດ ພາຍໃນ **ຂສສຊ** ແລະ ເຂົ້າ-ອອກ ສປປ ລາວ ຂອງນັກລົງທຶນເຫຼົ່ານັ້ນ.

## ໝວດທີ VI
## ບຸກຄະລາກອນ ແລະ ແຮງງານ

**ມາດຕາ 41 ການຄຸ້ມຄອງບຸກຄະລາກອນ ແລະ ແຮງງານ**

- ການພົວພັນ ແລະ ການຄຸ້ມຄອງດ້ານແຮງງານໂດຍພື້ນຖານແມ່ນໃຫ້ປະຕິບັດຕາມກົດໝາຍແຮງງານຂອງ ສປປ ລາວ, ນອກຈາກວ່າດຳລັດສະບັບນີ້ ແລະ ລະບຽບການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງຂອງ **ຂສສຊ** ຫາກໄດ້ກຳນົດໄວ້ຕ່າງຫາກ;

- ພະນັກງານ ແລະ ກຳມະກອນທີ່ເຮັດວຽກຢູ່ໃນວິສາຫະກິດຂອງ **ຂສສຊ** ຕ້ອງໄດ້ຮັບເງິນເດືອນ, ຜົນປະໂຫຍດ ແລະ ໄດ້ເຮັດວຽກຢູ່ໃນເງື່ອນໄຂທີ່ບໍ່ຕ່ຳກ່ວາມາດຕະຖານ ຊຶ່ງກຳນົດໄວ້ຢູ່ໃນກົດໝາຍແຮງງານຂອງ ສປປ ລາວ. ນອກຈາກວ່າລະບຽບການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ ຂອງ **ຂສສຊ** ຫາກກຳນົດໄວ້ຕ່າງຫາກ;

- ຄະນະບໍລິຫານ **ຂສສຊ** ຕ້ອງສ້າງຕັ້ງສູນບໍລິການແຮງງານ ແລະ ປະຕິບັດມາດຕະການເພື່ອປົກ

ປ້ອງແຮງງານ, ເພື່ອຊ່ວຍວິສາຫະກິດຕ່າງໆ ຂອງ **ຂສສຊ** ໃນການຈັດຫາແຮງງານ ແລະ ໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານແຮງງານ;

**ມາດຕາ 42 ແຜນກໍານົດສັນຍາຈ້າງແຮງງານ**

- ຄະນະບໍລິຫານ **ຂສສຊ** ຕ້ອງປະສານສົມທົບກັບ ກະຊວງແຮງງານ ສະຫວັດດີການສັງຄົມ ໃນການກໍານົດສັນຍາແຮງງານ ສໍາລັບພະນັກງານ ແລະ ຜູ້ອອກແຮງງານ ຢູ່ໃນບັນດາວິສາຫະກິດໃນ **ຂສສຊ.** ສໍາຫຼັບເງິນເດືອນ, ຄ່າແຮງງານ ແລະ ຜົນປະໂຫຍດຕ່າງໆຂອງພະນັກງານ ແລະ ກໍາມະກອນແມ່ນວິສາຫະກິດທີ່ກ່ຽວຂ້ອງເປັນຜູ້ກໍານົດແຕ່ບໍ່ໃຫ້ຕໍ່າກວ່າຂອບເຂດທີ່ກົດໝາຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງຂອງ **ຂສສຊ** ກໍານົດໄວ້. ໃນສັນຍາແຮງງານຕ້ອງໄດ້ກໍານົດມາດຕະການທີ່ຈໍາເປັນເພື່ອປ້ອງກັນສຸຂະພາບ, ຄວາມປອດໄພຂອງຜູ້ອອກແຮງງານ ແລະ ອຸບັດຕິເຫດແຮງງານ, ຖ້າຫາກມີອຸບັດຕິເຫດແຮງງານ ຕ້ອງຮັບປະກັນໃຫ້ຜູ້ວ່າຈ້າງແຮງງານມີການຊົດເຊີຍໃຫ້ແກ່ເຂົາເຈົ້າໃນມູນຄ່າທີ່ເໝາະສົມ;

**ມາດຕາ 43 ການຂະຫຍາຍວຽກເຮັດງານທໍາ**

ຄະນະບໍລິຫານ **ຂສສຊ** ຕ້ອງປະສານສົມທົບກັບກະຊວງແຮງງານ ສະຫວັດດີການສັງຄົມ ເພື່ອວາງມາດຕະການ ແລະ ແຜນການທີ່ເໝາະສົມ ໃນການຂະຫຍາຍການບໍລິການຂອງ **ຂສສຊ** ໂດຍການປະສານງານກັບອໍານາດການປົກຄອງທ້ອງຖິ່ນທີ່ຢູ່ໃກ້ຄຽງ ເພື່ອຂະຫຍາຍວຽກເຮັດງານທໍາ ໃຫ້ແກ່ພະນັກງານ ແລະ ຜູ້ອອກແຮງງານຂອງທ້ອງຖິ່ນ.

**ມາດຕາ 44 ການສົ່ງເສີມການຝຶກອົບຮົມ**

- ຄ່າໃຊ້ຈ່າຍຂອງວິສາຫະກິດ ທີ່ໄດ້ນໍາໃຊ້ເຂົ້າໃນການສົ່ງ ພະນັກງານ ແລະ ຜູ້ອອກແຮງງານ ທີ່ເປັນພົນລະເມືອງລາວຢູ່ໃນ **ຂສສຊ** ໄປຮໍ່າຮຽນ ຫຼື ຝຶກອົບຮົມ ເພື່ອພັດທະນາຄວາມຊໍານານງານນັ້ນ ສາມາດຕັດອອກຈາກອາກອນກໍາໄລ ຂອງວິສາຫະກິດດັ່ງກ່າວ. ແຕ່ຕ້ອງມີການຢັ້ງຢືນດ້ວຍລາຍລັກອັກສອນເປັນທາງການ;

- ທຸກໆ ວິສາຫະກິດຢູ່ໃນ **ຂສສຊ** ຕ້ອງໄດ້ພະຍາຍາມຫຼຸດຜ່ອນຈໍານວນພະນັກງານຄົນຕ່າງປະເທດ ດ້ວຍການຈັດຝຶກອົບຮົມວິຊາຊີບ ແລະ ສົ່ງເສີມການຖ່າຍທອດເຕັກໂນໂລຊີໃຫ້ແກ່ພະນັກງານທີ່ເປັນພົນລະເມືອງລາວ. ຄະນະບໍລິຫານ **ຂສສຊ** ອາດຈະຮຽກຮ້ອງໃຫ້ວິສາຫະກິດ ໃນ **ຂສສຊ** ກະກຽມ ແລະ ສົ່ງແຜນການຝຶກອົບຮົມ ແລະ ຖ່າຍທອດເຕັກໂນໂລຊີດັ່ງກ່າວໃຫ້;

**ມາດຕາ 45 ການຈ້າງພະນັກງານຕ່າງປະເທດ**

- ການຈ້າງພະນັກງານຄົນຕ່າງປະເທດ ເພື່ອເຂົ້າເຮັດວຽກໃນວິສາຫະກິດ ຢູ່ໃນ **ຂສສຊ** ຢູ່ຂັ້ນຜູ້ບໍລິຫານທຸລະກິດ, ທີ່ປຶກສາ, ວິຊາການດ້ານເຕັກນິກ ຫຼື ປະກອບເຂົ້າໃນຕໍາແໜ່ງຫວ່າງ ເພື່ອດໍາເນີນ

ການເຄື່ອນໄຫວວຽກງານຂອງທຸລະກິດຢ່າງເຕັມສ່ວນນັ້ນ ແມ່ນບໍ່ໃຫ້ກາຍ 30% ຂອງຈຳນວນພະນັກງານທັງໝົດ, ການຈ້າງແຮງງານຕ່າງປະເທດ ດັ່ງກ່າວ ຕ້ອງໄດ້ຖືກຮັບຮອງໂດຍ ຄະນະບໍລິຫານ **ຂສສຊ** ໂດຍບໍ່ຈຳເປັນຕ້ອງມີການອະນຸຍາດຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມຕື່ມອີກ;

- ຈຳນວນພະນັກງານຄົນຕ່າງປະເທດ ທີ່ກຳນົດໄວ້ໃນມາດຕານີ້ ຕ້ອງໄດ້ມີການທົບທວນ ແລະ ດັດແກ້ຄືນໃນທຸກໆ 3 ປີ ໂດຍ ຄະນະບໍລິຫານ **ຂສສຊ** ແລະ ອີງໃສ່ສະພາບຄວາມເປັນຈິງໃນການຕອບສະໜອງແຮງງານລາວໃນແຕ່ລະໄລຍະ;

## ໝວດທີ VII
## ວ່າດ້ວຍ ລະບອບການເງິນ ແລະ ການບັນຊີ

### ມາດຕາ 46 ການເສຍພາສີ, ອາກອນ ແລະ ພັນທະອື່ນໆ

ຜູ້ລົງທຶນຢູ່ພາຍໃນ **ຂສສຊ** ຕ້ອງເສຍພາສີ, ອາກອນ ແລະ ພັນທະອື່ນໆ ຕາມທີ່ລະບຸໄວ້ໃນດຳລັດສະບັບນີ້.

### ມາດຕາ 47 ການນຳໃຊ້ລະບອບບັນຊີ

ລະບອບບັນຊີຂອງຜູ້ລົງທຶນ ໃນ **ຂສສຊ** ແມ່ນໃຫ້ປະຕິບັດຕາມລະບອບບັນຊີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີວິສາຫະກິດ ຂອງ ສປປ ລາວ. ສ່ວນລະບອບບັນຊີອື່ນໆ ອາດຈະນຳໃຊ້ໄດ້ຖ້າຫາກໄດ້ຮັບອະນຸຍາດຈາກ ກະຊວງການເງິນ ຫຼື ອົງການຈັດຕັ້ງທີ່ໄດ້ຮັບມອບໝາຍຈາກກະຊວງການເງິນ.

### ມາດຕາ 48 ການນຳໃຊ້ສະກຸນເງິນ

ການພົວພັນຊື້-ຂາຍ ແລະ ການຊຳລະສະສາງຢູ່ໃນ **ຂສສຊ** ແມ່ນໃຫ້ຖືເອົາສະກຸນເງິນກີບເປັນຫຼັກ ແລະ ສາມາດນຳໃຊ້ສະກຸນເງິນຕາຕ່າງປະເທດໃດໜຶ່ງຢ່າງເສລີຊອບກົດໝາຍ, ເອົາອັດຕາແລກປ່ຽນໃນທ້ອງຕະຫຼາດເປັນຕົວກຳນົດ.

### ມາດຕາ 49 ການຈໍລະຈອນ ແລະ ການນຳໃຊ້ເງິນຕາຕ່າງປະເທດ

- ບັນດາລາຍຮັບຈາກການຂາຍສິນຄ້າ ຫຼື ຈາກທຸລະກິດການບໍລິການ ແລະ ລາຍໄດ້ອື່ນໆ ຂອງບັນດາຫົວໜ່ວຍທຸລະກິດ ຂອງ **ຂສສຊ** ທີ່ເປັນເງິນຕາຕ່າງປະເທດ ແມ່ນໃຫ້ໂອນເຂົ້າບັນຊີເງິນທີ່ຕົນເປີດໄວ້ໃນທະນາຄານ ຢູ່ **ຂສສຊ** ຫຼື ຢູ່ ສປປ ລາວ.

- ການນຳເງິນຕາຕ່າງປະເທດເຂົ້າ ຫຼື ອອກນອກ **ຂສສຊ** ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍໃນການຄຸ້ມຄອງການຈໍລະຈອນເງິນຕາຕ່າງປະເທດ ຕາມລະບຽບການສະເພາະທີ່ກ່ຽວຂ້ອງ ຂອງ **ຂສສຊ** ແລະ ລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 50 ການປະຕິບັດລະບຽບກົດໝາຍກ່ຽວກັບ ທະນາຄານ ແລະ ສະຖາບັນການເງິນ ໃນ ຂສສຊ**

50.1 ເພື່ອໃຫ້ **ຂສສຊ** ມີສະຖານະພາບ ທີ່ສາມາດປະຕິບັດວຽກງານການເງິນກັບຕ່າງປະເທດໄດ້ຢ່າງສະດວກຄ່ອງຕົວ ແລະ ມີເສລີພາບ (Offshore Status) ລະບຽບການດ້ານທະນາຄານ, ການເງິນ ແລະ ວັດຖຸມີຄ່າ ຂອງ **ຂສສຊ** ທີ່ຮັບປະກັນເສລີພາບໃນການດຳເນີນທຸລະກິດ ດ້ານທະນາຄານ ແລະ ສະຖາບັນການເງິນ, ການແລກປ່ຽນເງິນຕາຕ່າງປະເທດ ແລະ ການໂອນ-ຖອນ ບັນຊີການເງິນ ຂອງທະນາຄານ (ທັງສຳລັບວຽກງານການຄ້າ ແລະ ບໍ່ກ່ຽວກັບການຄ້າ), ການກູ້ຢືມຂອງຕ່າງປະເທດ, ການລົງທຶນ ແລະ ການຝາກເງິນ ຈະຕ້ອງຖືກກຳນົດອອກຕ່າງຫາກ ທັງນີ້ກໍເພື່ອໃຫ້ບັນດາ ທະນາຄານ ແລະ ສະຖາບັນການເງິນສາກົນ ທີ່ມາສ້າງຕັ້ງຢູ່ພາຍໃນ **ຂສສຊ** ແລະ ບັນດາຫົວໜ່ວຍທຸລະກິດລົງທຶນໃນ **ຂສສຊ** ສາມາດໄດ້ຮັບສິດທິປະໂຫຍດເຫຼົ່ານີ້ ແລະ ໂດຍໄດ້ຮັບການຮ່ວມມື ຈາກ ທະນາຄານ ແຫ່ງ ສປປ ລາວ.

50.2 ກົດໝາຍວ່າດ້ວຍການສ້າງຕັ້ງທະນາຄານແຫ່ງ ສປປ ລາວ ແລະ ລະບຽບການກ່ຽວກັບການຄຸ້ມຄອງການແລກປ່ຽນເງິນຕາຕ່າງປະເທດ ແລະ ການຊື້ຂາຍວັດຖຸມີຄ່າສາມາດນຳໃຊ້ກັບວິສາຫະກິດໃນ **ຂສສຊ** ໄດ້ໃນຂອບເຂດທີ່ບໍ່ຂັດກັບລະບຽບກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ຢູ່ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງດ້ານທະນາຄານ, ການເງິນ ແລະ ວັດຖຸມີຄ່າ ຂອງ **ຂສສຊ** ທີ່ຈະຕ້ອງກຳນົດອອກຕ່າງຫາກ.

**ໝວດທີ VIII**

**ວ່າດ້ວຍ ການຈັດຕັ້ງ ແລະ ການຄຸ້ມຄອງ ຂສສຊ**

**ມາດຕາ 51 ອົງການຄຸ້ມຄອງ ຂສສຊ**

ຄະນະບໍລິຫານ **ຂສສຊ** (ເອີ້ນຫຍໍ້ວ່າ "ຄຂສ", ເປັນພາສາອັງກິດເອີ້ນວ່າ Savan-Seno Special Economic Zone Authority ຫຼື ເອີ້ນຫຍໍ້ວ່າ"SEZA") ເປັນອົງການຈັດຕັ້ງສູງສຸດຂອງລັດຢູ່ໃນເຂດ **ຂສສຊ** ທີ່ມີໜ້າທີ່ຄຸ້ມຄອງການເຄື່ອນໄຫວຂອງ **ຂສສຊ,** ຊຶ່ງຂຶ້ນໂດຍກົງກັບລັດຖະບານ ໂດຍມີສຳນັກງານນາຍົກລັດຖະມົນຕີເປັນຜູ້ຊ່ວຍຊີ້ນຳ. ມີພາລະບົດບາດໃນການຄຸ້ມຄອງ ແລະ ສົ່ງເສີມການລົງທຶນຢູ່ໃນ **ຂສສຊ**, ຄົ້ນຄວ້າວາງແຜນ, ຄຸ້ມຄອງ, ຈັດຕັ້ງປະຕິບັດການພັດທະນາ **ຂສສຊ**, ສ້າງວຽກເຮັດງານທຳ ແລະ ເງື່ອນໄຂໃຫ້ແກ່ການຮຽນຮູ້, ການຖ່າຍທອດເຕັກໂນໂລຊີໃໝ່, ສ້າງຫໍ່ແໜງ ແລະ ປະຖົມປັດໃຈໃຫ້ແກ່ການຫັນປະເທດເປັນອຸດສະຫະກຳ ແລະ ທັນສະໄໝເທື່ອລະກ້າວ.

**ມາດຕາ 52 ສິດ, ໜ້າທີ່ ຂອງຄະນະບໍລິຫານ ຂສສຊ**

52.1 ຂອບເຂດສິດຂອງຄະນະບໍລິຫານ **ຂສສຊ** ມີດັ່ງນີ້:

- ຄົ້ນຄວ້າ, ອະນຸມັດການລົງທຶນພາຍໃນ ແລະ ຕ່າງປະເທດ ພ້ອມທັງອອກໃບອະນຸຍາດສ້າງຕັ້ງ

ແລະ ດຳເນີນທຸລະກິດ, ອະນຸຍາດດຳເນີນກິດຈະການ (ການຜະລິດ, ການຄ້າ, ການບໍລິການ ແລະ ທ່ອງທ່ຽວ), ເຊັນສັນຍາສຳປະທານ ຫຼື ບົດບັນທຶກຄວາມເຂົ້າໃຈ, ອອກໃບອະນຸຍາດຂະຫຍາຍກິດຈະການ, ຕໍ່ອາຍຸໃບອະນຸຍາດການລົງທຶນ ລວມທັງຍົກເລີກສັນຍາ, ລຶບລ້າງ ແລະ ຖອນໃບອະນຸຍາດການລົງທຶນຢູ່ໃນ **ຂສສຊ** ທີ່ເຫັນວ່າຜູ້ລົງທຶນບໍ່ປະຕິບັດຢ່າງຖືກຕ້ອງຕາມລະບຽບການຂອງ **ຂສສຊ** ກໍຄືຂອງ ສປປ ລາວ ທີ່ໄດ້ວາງອອກໃນແຕ່ລະໄລຍະ ໂດຍຮູບການບໍລິການແບບປະຕູດຽວ.

- ກວດກາການຈັດຕັ້ງປະຕິບັດຂໍ້ກຳນົດ, ກົດລະບຽບ, ກົດໝາຍ, ຄຳສັ່ງ, ແຈ້ງການ, ສັນຍາ, ຂໍ້ຕົກລົງຕ່າງໆ ທີ່ລັດຖະບານ ແລະ ຄະນະບໍລິຫານ **ຂສສຊ** ໄດ້ວາງອອກ ຫຼື ໄດ້ລົງນາມໃນແຕ່ລະໄລຍະ.

- ຄຸ້ມຄອງ, ຮັບເອົາ, ຈັດວາງສັບຊ້ອນ ແລະ ກໍ່ສ້າງພະນັກງານພາຍໃນການຈັດຕັ້ງຂອງຕົນ, ນັບທັງການຈັດຕັ້ງປະຕິບັດນະໂຍບາຍ, ສະເໜີປະຕິບັດນະໂຍບາຍຍ້ອງຍໍຊົມເຊີຍ, ເລື່ອນຊັ້ນ, ຂັ້ນເງິນເດືອນ, ເງິນແຮງງານ, ບຳເນັດ, ບຳນານ ແລະ ປະຕິບັດວິໄນຕໍ່ພະນັກງານ ຕາມລະບຽບກົດໝາຍຂອງລັດກໍຄືຂອງ **ຂສສຊ.**

- ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ຊັບສິນບັດຕ່າງໆ ຂອງ **ຂສສຊ** ໃຫ້ຖືກຕ້ອງຕາມລະບຽບການຂອງລັດ ແລະ ຂອງ **ຂສສຊ** ທີ່ວາງອອກ.

- ຄົ້ນຄວ້າປະຕິບັດນະໂຍບາຍຕໍ່ນັກລົງທຶນທີ່ມີຜົນງານດີເດັ່ນ ຫຼື ປະຕິບັດວິໃນຕໍ່ຜູ້ລະເມີດລະບຽບກົດໝາຍໃນການດຳເນີນກິດຈະການຕ່າງໆ ໃນຂອບເຂດຕົນຮັບຜິດຊອບ.

- ຮຽກປະຊຸມ, ອອກແຈ້ງການ, ໃຫ້ການແນະນຳເຜີຍແຜ່ໂຄສະນາກ່ຽວກັບວຽກງານທີ່ນອນຢູ່ໃນຄວາມຮັບຜິດຊອບ ຂອງ **ຂສສຊ** ຕາມສິດ ແລະ ໜ້າທີ່ຂອງຕົນ.

- ມີສິດຜູກພັນເຈລະຈາ ສັນຍາ ແລະ ຮ່ວມທຸລະກິດກັບນິຕິບຸກຄົນ (ວິສາຫະກິດ, ບໍລິສັດລັດ ແລະ ເອກະຊົນ) ພາຍໃນ ແລະ ຕ່າງປະເທດ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ.

- ນຳໃຊ້ງົບປະມານຂອງລັດຈຳນວນໜຶ່ງໃນເບື້ອງຕົ້ນ ທັງລະດົມຂົນຂວາຍການຮ່ວມທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ, ແຫຼ່ງທຶນ ແລະ ລາຍຮັບອື່ນໆ ຂອງ **ຂສສຊ** ເພື່ອພັດທະນາທີ່ດິນ, ປຸກສ້າງລະບົບສາທາລະນຸປະໂພກ ແລະ ຕຶກອາຄານ ພາຍໃນ **ຂສສຊ.**

- ສ້າງ ແລະ ນຳໃຊ້ແຫຼ່ງລາຍຮັບຂອງຕົນພາຍໃນ **ຂສສຊ** ໂດຍໃຫ້ສອດຄ່ອງກັບລະບຽບຫຼັກການຂອງກະຊວງການເງິນ ແລະ ລະບຽບການຂອງ **ຂສສຊ.**

- ກູ້ຢືມເງິນດອກເບ້ຍຕ່ຳຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງຂອງ **ຂສສຊ.**

- ປະຕິບັດສິດອື່ນໆ ຕາມທີ່ລັດຖະບານມອບໝາຍໃຫ້ໃນແຕ່ລະໄລຍະ.

**52.2** ໜ້າທີ່ຂອງ ຄະນະບໍລິຫານ **ຂສສຊ**

- ຄົ້ນຄວ້າສ້າງແຜນການລົງທຶນ ແລະ ນະໂຍບາຍຄົບຊຸດຂອງ **ຂສສຊ**;

- ສ້າງກົດລະບຽບສະເພາະໃນການເຄື່ອນໄຫວ ແລະ ການຄຸ້ມຄອງພາຍໃນ **ຂສສຊ**, ກຳນົດວິທີການ ແລະ ມາດຕະການໃນການພິຈາລະນາອະນຸມັດການລົງທຶນ, ຊຸກຍູ້ສົ່ງເສີມດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ;

- ລະດົມຂົນຂວາຍທຶນຮອນ ຫຼື ນັກລົງທຶນເພື່ອຈັດຕັ້ງປະຕິບັດວຽກງານສຳຫຼວດອອກແບບ, ວາງແຜນຂະຫຍາຍ, ຈັດສັນ ແລະ ພັດທະນາທີ່ດິນ, ກໍ່ສ້າງລະບົບໂຄງລ່າງ ເພື່ອຮອງຮັບການລົງທຶນພ້ອມທັງຕິດຕາມ ແລະ ກວດກາໂຄງການກໍ່ສ້າງເຫຼົ່ານັ້ນ;

- ຄຸ້ມຄອງບໍລິຫານການເຊົ່າຕຶກອາຄານ, ສິ່ງອຳນວຍຄວາມສະດວກ ແລະ ຊັບສິນຂອງລັດພາຍໃນເຂດ, ອຳນວຍຄວາມສະດວກໃນການອອກວີຊາ, ການນຳເຂົ້າ-ສົ່ງອອກສິນຄ້າ, ຄຸ້ມຄອງ ແລະ ສະໜອງແຮງງານໃຫ້ແກ່ຫົວໜ່ວຍທຸລະກິດຢູ່ ໃນ **ຂສສຊ**;

- ເກັບກຳຂໍ້ມູນກ່ຽວກັບການລົງທຶນຢູ່ໃນ **ຂສສຊ**, ຈັດຕັ້ງລະບົບໂຄສະນາຂົນຂວາຍ, ເຜີຍແຜ່ນະໂຍບາຍ, ຂໍ້ມູນ, ຂໍ້ກຳນົດ, ລະບຽບຫຼັກການ, ກົດໝາຍເພື່ອສົ່ງເສີມ ແລະ ດຶງດູດການລົງທຶນມາສູ່ **ຂສສຊ**;

- ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການຮຽນຮູ້ ແລະ ຖ່າຍທອດບົດຮຽນດ້ານການບໍລິຫານທຸລະກິດ, ເຕັກໂນໂລຊີທີ່ທັນສະໄໝ, ສ້າງວຽກເຮັດງານທຳໃຫ້ປະຊາຊົນລາວ ແລະ ຝຶກອົບຮົມພະນັກງານກຳມະກອນລາວ ໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນ;

- ຕິດຕາມ, ກວດກາ, ເກັບກຳ, ແນະນຳ, ອຳນວຍຄວາມສະດວກ ແລະ ຊຸກຍູ້ບັນດາຫົວໜ່ວຍການຜະລິດ, ການບໍລິການໃນການດຳເນີນກິດຈະການຕ່າງໆ ພາຍໃນ **ຂສສຊ** ແລະ ລາຍງານໃຫ້ລັດຖະບານ ກໍຄືອຳນາດການປົກຄອງທ້ອງຖິ່ນຊາບ ຢ່າງປົກກະຕິ ແລະ ທັນເວລາ;

- ຄຸ້ມຄອງ ແລະ ນຳໃຊ້ງົບປະມານ (ຄັງເງິນເດືອນ) ໃຫ້ຖືກຕ້ອງສອດຄ່ອງຕາມລະບຽບຫຼັກການຂອງ ກະຊວງການເງິນວາງອອກ;

- ສົມທົບກັບອຳນາດການປົກຄອງແຂວງ ສະຫວັນນະເຂດ ເພື່ອຄົ້ນຄວ້າ ແລະ ນຳສະເໜີລັດຖະບານກ່ຽວກັບການເວນຄືນທີ່ດິນ, ການຍົກຍ້າຍ ແລະ ຈັດສັນປະຊາຊົນອອກຈາກພື້ນທີ່ຂອງໂຄງການພັດທະນາ **ຂສສຊ** ໂດຍອີງໃສ່ກົດໝາຍວ່າດ້ວຍທີ່ດິນ;

- ພົວພັນປະສານສົມທົບກັບພາກສ່ວນຕ່າງໆ ທັງທ້ອງຖິ່ນ ແລະ ສູນກາງເພື່ອວາງແຜນນະໂຍບາຍໃນການກະຕຸກຊຸກຍູ້ສົ່ງເສີມການລົງທຶນຂອງພາຍໃນ ແລະ ຕ່າງປະເທດໃຫ້ມີປະສິດທິຜົນສູງສຸດ.

- ກຳນົດປະເພດຂອງກິດຈະການດ້ານອຸດສາຫະກຳ, ການຄ້າ ແລະ ການບໍລິການທີ່ເປັນທ່າແຮງສົມທຽບ (Comparative advantage) ແລະ ທ່າໄດ້ປຽບດ້ານການຕະຫຼາດ (Competitive

advantage) ເພື່ອດຶງດູດ ແລະ ສົ່ງເສີມໃຫ້ນັກລົງທຶນມາລົງທຶນໃສ່ກິດຈະການເຫຼົ່ານັ້ນ ໃນ **ຂສສຊ** ຢ່າງມີເປົ້າໝາຍ ແລະ ຈຸດສຸມ;

**-** ກຳນົດປະເພດຂອງກິດຈະການທີ່ຫ້າມບໍ່ໃຫ້ລົງທຶນໃນ **ຂສສຊ** ເນື່ອງຈາກມີຜົນກະທົບຕໍ່ສິ່ງແວດລ້ອມ, ຕໍ່ກິດຈະການອື່ນໃນ **ຂສສຊ**, ຕໍ່ສັງຄົມ ແລະ ຄວາມປອດໄພຂອງ ສປປ ລາວ;

- ຊີ້ນຳ ແລະ ວາງລະບົບ-ລະບຽບການປົກປັກຮັກສາສິ່ງອຳນວຍຄວາມສະດວກ ແລະ ບົວລະບັດຮັກສາພື້ນຖານໂຄງລ່າງ, ຮັກສາຄວາມປອດໄພ ແລະ ສິ່ງແວດລ້ອມ ແລະ ປ້ອງກັນອຸບັດຕິເຫດໄພຕ່າງໆ ຢູ່ພາຍໃນ **ຂສສຊ**;

- ກຳນົດ ແລະ ເກັບ ອັດຕາຄ່າບໍລິການ, ຄ່າທຳນຽມ ແລະ ລາຍຮັບ ຕ່າງໆໃນການບໍລິຫານຄຸ້ມຄອງ **ຂສສຊ;**

- ກວດສອບ ແລະ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ຮັບຮອງຊະນິດ ແລະ ປະລິມານຂອງວັດຖຸດິບ ຫຼື ຜະລິດຕະພັນ ຫຼື ຊະນິດ ແລະ ຈຳນວນຂອງເຄື່ອງຈັກ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງສຳລັບກໍລະນີທີ່ຈຳເປັນຕ້ອງໄດ້ອອກໃບຮັບຮອງ ຫຼື ໃນກໍລະນີທີ່ນຳເຂົ້າມາໃນ ຫຼື ນຳອອກນອກເຂດອຸດສາຫະກຳ ແລະ ການປຸງແຕ່ງເພື່ອສົ່ງອອກ (EPZ) ຂອງ **ຂສສຊ** ໂດຍເກັບຄ່າບໍລິການທີ່ ຄະນະບໍລິຫານ **ຂສສຊ** ຈະກຳນົດອອກ;

- ແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ພິຈາລະນາເອົາຜູ້ກວດສອບບັນຊີມາປະຈຳຢູ່ **ຂສສຊ;**

- ກວດກາສະພາບການເປັນຢູ່ຂອງແຮງງານ ແລະ ກຳມະກອນ ພາຍໃນ **ຂສສຊ**;

- ຄົ້ນຄ້ວາ ແລະ ວາງແຜນການກ່ຽວກັບລາຍຮັບ ແລະ ລາຍຈ່າຍ, ແຜນການດ້ານການເງິນ ປະຈຳປີຂອງ ຄະນະບໍລິຫານ **ຂສສຊ,** ສ້າງທຶນສຳຮອງ ແລະ ຊອກແຫຼ່ງທຶນ ຫຼື ກູ້ຢືມເງິນເພື່ອລົງທຶນໃສ່ວຽກງານທີ່ເປັນພັນທະ, ການບໍລິການ ຂອງ ຄະນະບໍລິຫານ **ຂສສຊ** ແລະ ການຂະຫຍາຍການພັດທະນາພື້ນຖານໂຄງລ່າງຂອງ **ຂສສຊ** ຫຼື ລົງທຶນໃສ່ກິດຈະການໃດທີ່ເຫັນວ່າເໝາະສົມ ຢູ່ພາຍໃນ **ຂສສຊ**;

- ວາງແຜນ ແລະ ນຳສະເໜີຕໍ່ ລັດຖະບານ ກ່ຽວກັບການຂໍຂະຫຍາຍເນື້ອທີ່ດິນ ຂອງ **ຂສສຊ** ທີ່ຕ້ອງການເພີ່ມເຕີມໃນກໍລະນີທີ່ເຫັນວ່າເນື້ອທີ່ດິນທີ່ລັດຖະບານໄດ້ມອບໃຫ້ໃນເບື້ອງຕົ້ນ ຕາມດຳລັດສະບັບນີ້ ຫາກບໍ່ພຽງພໍສຳລັບການພັດທະນາຕໍ່ໄປແລ້ວ;

- ປະສານສົມທົບກັບ ບັນດາຂະແໜງການທີ່ກ່ຽວຂ້ອງຢູ່ສູນກາງ ແລະ ອຳນາດການປົກຄອງແຂວງສະຫວັນນະເຂດກ່ຽວກັບວຽກງານທີ່ພົວພັນກັບ **ຂສສຊ**;

- ສະຫຼຸບສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນການປະຈຳເດືອນ, ປະຈຳງວດ ແລະ ປະຈຳປີໃຫ້ແກ່ລັດຖະບານ ແລະ ແຂວງສະຫວັນນະເຂດ ຢ່າງປົກກະຕິ ແລະ ທັນກັບກຳນົດເວລາ.

- ປະຕິບັດໜ້າທີ່ອື່ນໆ ຕາມທີ່ລັດຖະບານມອບໝາຍໃຫ້ໃນແຕ່ລະໄລຍະ.

**ມາດຕາ 53 ຖານະນິຕິບຸກຄົນຂອງ ຄະນະບໍລິຫານ ຂສສຊ**

ຄະນະບໍລິຫານ **ຂສສຊ** ເປັນອົງການຄຸ້ມຄອງ ບໍລິຫານຂອງລັດ ມີຖານະນິຕິບຸກຄົນ, ມີກາປະທັບເພື່ອເຄື່ອນໄຫວວຽກງານທາງລັດຖະການຂອງຕົນ, ມີບັນຊີເງິນ, ມີຄວາມສາມາດທາງດ້ານກົດໝາຍໃນການຟ້ອງ ຫຼື ຖືກຟ້ອງ, ເປັນຫົວໜ່ວຍງົບປະມານຂັ້ນ 1, ມີແຫຼ່ງລາຍຮັບຕ່າງໆ ທີ່ໄດ້ມາຈາກ **ຂສສຊ** ຊຶ່ງ ຄະນະ ສາມາດຄຸ້ມຄອງ ແລະ ນຳໃຊ້ໄດ້ຕາມການຕົກລົງເຫັນດີຂອງລັດຖະບານ.

**ມາດຕາ 54 ແຫຼ່ງທຶນຂອງ ຄະນະບໍລິຫານ ຂສສຊ**

ແຫຼ່ງທຶນຂອງ ຄະນະບໍລິຫານ **ຂສສຊ** ໄດ້ມາຈາກ:

1. ສ່ວນແບ່ງຈາກງົບປະມານແຫ່ງຊາດ;
2. ຄ່າບໍລິການ, ຄ່າທຳນຽມ ແລະ ລາຍຮັບອື່ນໆ ທີ່ຄະນະບໍລິຫານ **ຂສສຊ** ເກັບໄດ້ຈາກການບໍລິຫານຄຸ້ມຄອງ **ຂສສຊ** ຕາມດຳລັດສະບັບນີ້; ແລະ
3. ທຶນ ແລະ ຊັບສິນທີ່ໄດ້ຮັບຈາກການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ.

**ມາດຕາ 55 ການບໍລິການຜ່ານປະຕູດຽວ**

- ຄະນະບໍລິຫານ **ຂສສຊ** ຕ້ອງສ້າງຕັ້ງຫ້ອງການ ຫຼື ໜ່ວຍງານບໍລິການຜ່ານປະຕູດຽວ ເພື່ອອຳນວຍຄວາມສະດວກໃນການອອກໃບອະນຸຍາດລົງທຶນໃຫ້ແກ່ນັກລົງທຶນ ພາຍໃນ **ຂສສຊ**, ການຂຶ້ນທະບຽນວິສາຫະກິດໃໝ່, ການອະນຸຍາດສົ່ງອອກ, ການນຳເຂົ້າ ແລະ ການອອກໃບອະນຸຍາດ ແລະ ການເສັຍພັນທະຕ່າງໆ ເພື່ອອຳນວຍຄວາມສະດວກວ່ອງໄວ ແລະ ປະສິດທິຜົນສູງສຸດໃນການດຳເນີນທຸລະກິດຢູ່ໃນ **ຂສສຊ;**

- ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດຖະບານ ທີ່ມີສ່ວນຮ່ວມໃນການຂຶ້ນທະບຽນວິສາຫະກິດ, ອອກໃບອະນຸຍາດ ແລະ ການເກັບພັນທະຕ່າງໆ ຕ້ອງໃຫ້ການຮ່ວມມື ແລະ ແຕ່ງຕັ້ງຕົວແທນຂອງຕົນ ໃຫ້ໄປເຮັດວຽກຢູ່ **ຂສສຊ** ເພື່ອຈັດຕັ້ງລະບົບຜ່ານປະຕູດຽວໃຫ້ຄົບຖ້ວນ.

**ມາດຕາ 56 ການສົ່ງເສີມຄວາມເປັນເອກະພາບໃນຫົວໜ່ວຍແຮງງານ**

ເພື່ອໃຫ້ການເຄື່ອນໄຫວວຽກງານມີຄວາມກົມກຽວກັນຢູ່ໃນ **ຂສສຊ** ຕ້ອງໄດ້ສ້າງອົງກອນໜຶ່ງຂຶ້ນຊຶ່ງປະກອບ ດ້ວຍຕົວແທນຂອງ 3 ຝ່າຍຄື: ຕົວແທນຈາກ ກະຊວງແຮງງານ, ສະຫວັດດີການ ແລະ ສັງຄົມ ຫຼື ຄະນະບໍລິຫານ **ຂສສຊ** (ທີ່ຮັບຜິດຊອບວຽກງານດ້ານແຮງງານ, ສະຫວັດດີການ ແລະ ສັງຄົມ ຫຼື ວຽກກຳມະບານ) 1 ທ່ານ, ຕາງໜ້າຜູ້ອອກແຮງງານ 1 ທ່ານ ແລະ ຕາງໜ້າພາກສ່ວນທຸລະກິດ (ໂດຍສະເພາະຈາກຂະແໜງອຸດສາຫະກຳ) 1 ທ່ານ. ຄະນະນີ້ ສ້າງຂຶ້ນເພື່ອກຳນົດກົນໄກໃນການສົ່ງເສີມ ແລະ ຮັກສາຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໃນ **ຂສສຊ**. ຄະນະນີ້ຈະຖືກສ້າງຕັ້ງຂຶ້ນຖາວອນຫຼັງຈາກດຳລັດສະບັບນີ້ມີຜົນບັງຄັບໃຊ້.

**ມາດຕາ57 ການພົວພັນກັບແຜນການຂອງລັດຖະບານ**

ຄະນະບໍລິຫານ **ຂສສຊ** ຕ້ອງກຳນົດເປົ້າໝາຍໃນການພັດທະນາ **ຂສສຊ** ຢູ່ໃນແຜນນະໂຍບາຍ, ເປົ້າໝາຍ ແລະ ແຜນພັດທະນາເສດຖະກິດສັງຄົມຂອງຊາດ, ຄະນະບໍລິຫານ **ຂສສຊ** ແລະ ວິສາຫະກິດປະສົມລົງທຶນກໍ່ສ້າງພື້ນຖານໂຄງລ່າງ (ຖ້າມີ, ຕາມທີ່ກຳນົດໄວ້ໃນມາດຕາ 60 ຂອງດຳລັດສະບັບນີ້) ຕ້ອງສົ່ງແຜນການ ແລະ ໂຄງການພັດທະນາຂອງ **ຂສສຊ** ທີ່ໄດ້ຖືກຮັບຮອງຈາກ ຄະນະບໍລິຫານ **ຂສສຊ** ໃຫ້ແກ່ອຳນາດການປົກຄອງແຂວງ ແລະ ລັດຖະບານ ເພື່ອເອົາເຂົ້າຢູ່ໃນແຜນພັດທະນາລວມຂອງແຂວງ ແລະ ລັດຖະບານ;

**ມາດຕາ 58 ສາຍພົວພັນກັບໜ່ວຍງານຂອງອຳນາດການປົກຄອງທ້ອງຖິ່ນ**

ຄະນະບໍລິຫານ **ຂສສຊ** ຕ້ອງປະສານສົມທົບແໜ້ນກັບອຳນາດການປົກຄອງທ້ອງຖິ່ນເພື່ອຮັບປະກັນຄວາມເປັນເອກະພາບໃນການດຳເນີນງານຂອງເຂດ ຕາມຫຼັກການຂອງການຄຸ້ມຄອງລັດທີ່ວາງອອກ;

**ມາດຕາ 59 ການພົວພັນກັບພາກເອກະຊົນ.**

ວິສາຫະກິດປະສົມລົງທຶນກໍ່ສ້າງພື້ນຖານໂຄງລ່າງ (ຖ້າມີ) ແລະ ພາກເອກະຊົນຕ້ອງບໍລິຫານຕົນເອງ ແລະ ມີຄວາມເປັນເອກະລາດໃນການປະຕິບັດເປົ້າໝາຍຕາມສັນຍາການລົງທຶນຢູ່ໃນ **ຂສສຊ.** ຄະນະບໍລິຫານ **ຂສສຊ** ມີສິດໃນການຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍດຶງດູດການລົງທຶນ ແລະ ການດຳເນີນທຸລະກິດຂອງພາກເອກະຊົນດັ່ງກ່າວ;

**ມາດຕາ 60 ວິສາຫະກິດລົງທຶນກໍ່ສ້າງ, ບົວລະບັດຮັກສາ ໂຄງລ່າງ ແລະ ບໍລິການ ພາຍໃນ ຂສສຊ**

ອີງຕາມ ມາດຕາ 12 ກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງຂອງ **ຂສສຊ** ຕາມດຳລັດສະບັບນີ້, ໃນກໍລະນີທີ່ລັດຖະບານອະນຸຍາດໃຫ້ ວິສາຫະກິດເອກະຊົນພາຍໃນ ຫຼື ຕ່າງປະເທດລົງທຶນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ໃນຮູບການລົງທຶນຮ່ວມກັບລັດຖະບານ, ວິສາຫະກິດປະສົມລົງທຶນພັດທະນາພື້ນຖານໂຄງລ່າງ (Joint Venture Corporation) ລະຫວ່າງລັດ ແລະ ເອກະຊົນດັ່ງກ່າວ ຈະຖືກສ້າງຕັ້ງຂຶ້ນບົນພື້ນຖານສັນຍາຮ່ວມທຶນ, ຊຶ່ງຈະເປັນອົງກອນທີ່ຮັບຜິດຊອບການລົງທຶນກໍ່ສ້າງລະບົບສາທາລະນຸປະໂພກ ຂອງ **ຂສສຊ,** ຕະຫຼອດເຖິງ ການບົວລະບັດຮັກສາລະບົບດັ່ງກ່າວ ແລະ ເກັບກູ້ເງິນຄືນຈາກຄ່າເຊົ່າທີ່ດິນທີ່ໄດ້ຈັດສັນໄວ້ ແລະ ຄ່າບໍລິການອື່ນໆ ພາຍໃນ **ຂສສຊ** ຈາກວິສາຫະກິດທີ່ມາລົງທຶນ (ເປັນລູກຄ້າ) ຂໍເຊົ່າທີ່ດິນຢູ່ໃນ **ຂສສຊ,** ຊຶ່ງລາຍລະອຽດຂອງສິດ ແລະ ໜ້າທີ່ ຂອງວິສາຫະກິດປະສົມນີ້ ຈະໄດ້ລະບຸໄວ້ຢ່າງລະອຽດໃນສັນຍາຮ່ວມທຶນ ລະຫວ່າງ ສອງຝ່າຍ.

## ໝວດທີ IX

## ວ່າດ້ວຍ ການຮັກສາຄວາມປອດໄພ, ການຍ້ອງຍໍ ແລະ ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 61 ການປ້ອງກັນ ແລະ ຮັກສາຄວາມປອດໄພ

ການປ້ອງກັນ ແລະ ການຮັກສາຄວາມປອດໄພຂອງ **ຂສສຊ** ແມ່ນຄວາມຮັບຜິດຊອບຂອງ ລັດຖະບານ ໂດຍມີການປະສານສົມທົບກັບ ຄະນະບໍລິຫານ **ຂສສຊ**. ກຳລັງທີ່ຖືກສົ່ງໄປເພື່ອຮັກສາ ຄວາມປອດໄພ ບໍ່ໃຫ້ຫຍຸ້ງກ່ຽວກັບວຽກງານພາຍໃນຂອງ **ຂສສຊ** ແລະ ຄ່າໃຊ້ຈ່າຍສຳລັບກຳລັງນີ້ ແມ່ນ ລັດຖະບານເປັນຜູ້ຮັບຜິດຊອບ. ຄະນະບໍລິຫານ **ຂສສຊ** ສາມາດສະໜອງ ແລະ ສ້າງຕັ້ງກຳລັງຮັກສາ ຄວາມປອດໄພ ແລະ ໜ່ວຍດັບເພີງຂອງຕົນເອງພາຍໃນ **ຂສສຊ** ຂຶ້ນໄດ້.

### ມາດຕາ 62 ການຍ້ອງຍໍ

ບຸກຄົນ ແລະ ການຈັດຕັ້ງ, ວິສາຫະກິດທີ່ມີຜົນງານດີເດັ່ນໃນການບໍລິຫານ, ຄຸ້ມຄອງ ແລະ ພັດທະນາໃນ **ຂສສຊ** ຈະໄດ້ຮັບການຍ້ອງຍໍຊົມເຊີຍຈາກ ຄະນະບໍລິຫານ **ຂສສຊ** ຫຼື ລັດຖະບານ, ຊຶ່ງ ລະບຽບການຍ້ອງຍໍຈະຖືກກຳນົດຕ່າງຫາກ.

### ມາດຕາ 63 ການແກ້ໄຂຂໍ້ຂັດແຍ່ງໂດຍຄູ່ກໍລະນີ

ໃນການດຳເນີນທຸລະກິດການຜະລິດ, ປຸງແຕ່ງ, ການຄ້າ ແລະ ການບໍລິການຢູ່ໃນ **ຂສສຊ** ຖ້າມີຂໍ້ ຂັດແຍ່ງໃດໜຶ່ງເກີດຂຶ້ນ ໃຫ້ຄູ່ກໍລະນີຊອກຫາຊ່ອງທາງແກ້ໄຂໂດຍວິທີການສຶກສາອົບຮົມ, ໄກ່ເກ່ຍ, ການປະນີປະນອມ ຊຶ່ງກັນ ແລະ ກັນ.

### ມາດຕາ 64 ການໄກ່ເກ່ຍ ແລະ ການຮ້ອງຟ້ອງ

ຖ້າການປະນີປະນອມ ເພື່ອແກ້ໄຂຂໍ້ຂັດແຍ່ງໂດຍຄູ່ກໍລະນີ ຫາກບໍ່ໄດ້ຜົນ ຫຼື ຄູ່ກໍລະນີໃດໜຶ່ງ ບໍ່ ຍອມເລືອກເອົາຮູບການໄກ່ເກ່ຍທີ່ກ່າວໃນມາດຕາ 63 ເທິງນີ້, ຄູ່ກໍລະນີສາມາດສະເໜີຂໍ້ຂັດແຍ່ງນັ້ນ ໃຫ້ ຄະນະບໍລິຫານ **ຂສສຊ** ຫຼື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອໄກ່ເກ່ຍແກ້ໄຂ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອດຳເນີນຄະດີຕາມລະບຽບກົດໝາຍ ຂອງ ສປປ ລາວ ແລະ ສົນທິສັນຍາສາກົນ ຕ່າງໆ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ X

## ວ່າດ້ວຍ ມາດຕະການຕໍ່ການລ່ວງລະເມີດ

### ມາດຕາ 65 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີການລະເມີດຢູ່ໃນ ຫຼື ນອກ **ຂສສຊ** ແມ່ນຈະໄດ້ຮັບຜິດຊອບຕໍ່ການ ລະເມີດຂອງຕົນຕາມດຳລັດສະບັບນີ້, ລະບຽບການອື່ນໆ ຂອງ **ຂສສຊ** ທີ່ກ່ຽວຂ້ອງ ແລະ ລະບຽບກົດ

ໝາຍ ຂອງ ສປປ ລາວ.

65.1 ມາດຕະການຕໍ່ການບໍ່ເສຍພັນທະດ້ານພາສີ-ອາກອນ

- ໃນກໍລະນີທີ່ກວດພົບວ່າ ຜູ້ລົງທຶນໃນ **ຂສສຊ** ຫາກບໍ່ປະຕິບັດຕາມມາດຕາ 46 ຂອງ ດຳລັດສະບັບນີ້ ຜູ້ລົງທຶນດັ່ງກ່າວ ຈະຕ້ອງຢຸດການດຳເນີນກິດຈະການ, ຖືກດຳເນີນການປັບໃໝຕາມລະບຽບການຂອງ **ຂສສຊ** ທີ່ກ່ຽວຂ້ອງ ແລະ ລະບຽບກົດໝາຍ ຂອງ ສປປ ລາວ.

65.2 ມາດຕະການຕໍ່ການລະເມີດລະບຽບການປຸກສ້າງ

- ນັກລົງທຶນໃນ **ຂສສຊ** ຜູ້ໃດຫາກບໍ່ປະຕິບັດຕາມມາດຕາ 18.1 ຂອງ ດຳລັດສະບັບນີ້ ຜູ້ລົງທຶນດັ່ງກ່າວຈະຕ້ອງຖືກປັບໃໝເປັນຈຳນວນເງິນກີບ (ຫຼື ເງິນຕາຕ່າງປະເທດ) ທີ່ທຽບເທົ່າກັບ 500 (ຫ້າຮ້ອຍ) ໂດລາສະຫະລັດ ແລະ ຢຸດການດຳເນີນກິດຈະການຈົນກວ່າວ່າຈະຖືກພິຈາລະນາຈາກ ຄະນະບໍລິຫານ **ຂສສຊ.**

65.3 ມາດຕະການຕໍ່ການລະເມີດລະບຽບການເອົາເຄື່ອງຂອງອອກຈາກ **ຂສສຊ**

- ບຸກຄົນ ຫຼື ນັກລົງທຶນໃນ **ຂສສຊ** ຜູ້ໃດຫາກລະເມີດຂໍ້ຫ້າມຂອງມາດຕາ 32 ວັກ 3 ຂອງ ດຳລັດສະບັບນີ້ ບຸກຄົນ ຫຼື ຜູ້ລົງທຶນນັ້ນ ຈະຕ້ອງຖືກຈຳກັດອິດສະລະພາບເປັນເວລາບໍ່ເກີນ 06 ເດືອນ ຫຼື ຖືກປັບໃໝເປັນຈຳນວນເງິນກີບ (ຫຼື ເງິນຕາຕ່າງປະເທດ) ທີ່ທຽບເທົ່າກັບ 2000 (ສອງພັນ) ໂດລາສະຫະລັດ ຫຼື ທັງຈຳກັດອິດສະລະພາບ ແລະ ທັງປັບໃໝ.

65.4 ມາດຕະການຕໍ່ການລະເມີດລະບຽບການຂາຍຍານພາຫະນະ

- ບຸກຄົນ ຫຼື ນັກລົງທຶນໃນ **ຂສສຊ** ຜູ້ໃດຫາກລະເມີດຂໍ້ຫ້າມໃນການລັກຂາຍ, ລັກມອບໂອນຍານພາຫະນະຕາມ ມາດຕາ 26.5 ຂອງ ດຳລັດສະບັບນີ້ ບຸກຄົນ ຫຼື ຜູ້ລົງທຶນຜູ້ນັ້ນ ຈະຕ້ອງຖືກປັບໃໝເປັນຈຳນວນເງິນກີບ (ຫຼື ເງິນຕາຕ່າງປະເທດ) ທີ່ທຽບເທົ່າກັບ 5000 (ຫ້າພັນ) ໂດລາສະຫະລັດ ບວກກັບລາຄາຂອງຍານພາຫະນະທີ່ໄດ້ຫຼັກຂາຍ ຫຼື ມອບໂອນ ແລ້ວນັ້ນ.

65.5 ມາດຕະການຕໍ່ການລະເມີດລະບຽບການເຂົ້າ-ອອກ **ຂສສຊ**

- ບຸກຄົນໃດຫາກບໍ່ປະຕິບັດຕາມມາດຕາ 37, 38 ແລະ 39 ຂອງ ດຳລັດສະບັບນີ້ ຈະຕ້ອງຖືກຈຳກັດອິດສະລະພາບ ເປັນເວລາບໍ່ເກີນ 01 ເດືອນ ຫຼື ຖືກປັບໃໝເປັນຈຳນວນເງິນກີບ (ຫຼື ເງິນຕາຕ່າງປະເທດ) ທີ່ທຽບເທົ່າກັບ 50 (ຫ້າສິບ) ໂດລາສະຫະລັດ ຫຼື ທັງຈຳກັດອິດສະລະພາບ ແລະ ທັງປັບໃໝ.

65.6 ມາດຕະການຕໍ່ການຂັດຂວາງວຽກງານການກວດກາຂອງເຈົ້າໜ້າທີ່ຂອງ ຄະນະບໍລິຫານ **ຂສສຊ**

- ບຸກຄົນຜູ້ໃດ ຫຼື ວິສາຫະກິດໃດ ຂອງ **ຂສສຊ** ຫາກບໍ່ປະຕິບັດ ຕາມມາດຕາ 22 ວັກ 3 ແລະ

7 ຂອງ ດຳລັດສະບັບນີ້ ຈະຕ້ອງຖືກປັບໃໝເປັນຈຳນວນເງິນກີບ (ຫຼື ເງິນຕາຕ່າງປະເທດ) ທີ່ທຽບເທົ່າກັບ 200 (ສອງຮ້ອຍ) ໂດລາສະຫະລັດ.

65.7 ມາດຕະການຕໍ່ການນຳໃຊ້ຊື່ ຂອງ **ຂສສຊ**

- ບຸກຄົນຜູ້ໃດ ຫຼື ວິສາຫະກິດໃດ ຂອງ **ຂສສຊ** ຫາກບໍ່ປະຕິບັດ ຕາມມາດຕາ 74 ຂອງ ດຳລັດສະບັບນີ້ ຈະຕ້ອງຖືກປັບໃໝເປັນຈຳນວນເງິນກີບ (ຫຼື ເງິນຕາຕ່າງປະເທດ) ທີ່ທຽບເທົ່າກັບ 200 (ສອງຮ້ອຍ) ໂດລາສະຫະລັດ ແລະ ຖືກປະຕິບັດມາດຕະການອື່ນໆ ທີ່ຈະໄດ້ກຳນົດຕ່າງຫາກ ຊຶ່ງຂຶ້ນກັບກໍລະນີໜັກ ຫຼື ເບົາຂອງການລະເມີດນັ້ນ.

## ໝວດທີ XI
## ວ່າດ້ວຍ ບົດບັນຍັດສຸດທ້າຍ

### ມາດຕາ 66 ການຈັດຕັ້ງປະຕິບັດ

ຄະນະບໍລິຫານ **ຂສສຊ**, ອຳນາດການປົກຄອງແຂວງສະຫວັນນະເຂດ, ຜູ້ລົງທຶນ, ພະນັກງານ, ກຳມະກອນຂອງ **ຂສສຊ** ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 67 ການໃຊ້ຊື່ ຂອງ ຂສສຊ

ນອກຈາກ ຄະນະບໍລິຫານ **ຂສສຊ** ແລ້ວ, ຫ້າມບໍ່ໃຫ້ບຸກຄົນ ຫຼື ນິຕິບຸກຄົນໃດໃຊ້ຊື່ທີ່ເປັນໜັງສືຕົວລາວ ຫຼື ຕ່າງປະເທດທີ່ແປ ຫຼື ອ່ານວ່າ " ເຂດເສດຖະກິດພິເສດ ສະຫວັນ-ເຊໂນ" ຫຼື "ຄະນະບໍລິຫານເຂດເສດຖະກິດພິເສດ ສະຫວັນ-ເຊໂນ" ໃນກາປະທັບຂອງຕົນ, ປ້າຍຊື່, ຫົວຂວັ້ນຈົດໝາຍ, ໃບແຈ້ງການ ຫຼື ເອກະສານຢ່າງອື່ນທີ່ກ່ຽວກັບທຸລະກິດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດເປັນການສະເພາະ ຈາກຄະນະບໍລິຫານ **ຂສສຊ.**

### ມາດຕາ 68 ການຍົກເວັ້ນ

ຂໍ້ບັນຍັດຂອງດຳລັດສະບັບນີ້ມີລັກສະນະພິເສດຂອງຕົນ. ເຖິງວ່າມີບາງຂໍ້ບັນຍັດຂອງດຳລັດສະບັບນີ້ບໍ່ສອດຄ່ອງກັບນິຕິກຳອື່ນກໍຕາມ, ແຕ່ບົດບັນຍັດຂອງດຳລັດສະບັບນີ້ມີຜົນສັກສິດ ຍ້ອນວ່າ ດຳລັດສະບັບນີ້ມີຂອບເຂດ ຈັດຕັ້ງປະຕິບັດສະເພາະແຕ່ຢູ່ໃນຂອບເຂດ ແລະ ຕໍ່ **ຂສສຊ** ເທົ່ານັ້ນ.

### ມາດຕາ 69 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກດຳລັດ, ຂໍ້ກຳນົດ ແລະ ລະບຽບການອື່ນໆ ທີ່ວາງອອກໃນເມື່ອກ່ອນຫາກຂັດກັບເນື້ອໃນຂອງດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ ເລກທີ 089 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 04. 02. 2010

# ດຳລັດ

## ວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງເຂດເສດຖະກິດພິເສດ ບໍ່ເຕ່ນແດນຄຳ, ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ, ສປປ ລາວ

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 26 ພຶດສະພາ 2003;
- ອີງຕາມ ລັດຖະດຳລັດຂອງປະທານປະເທດ ແຫ່ງ ສປປ ລາວ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ....... ສປປ, ລົງວັນທີ 20 ກໍລະກົດ 2009;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0120/ຜທ.ລທ4, ລົງວັນທີ 19 ມັງກອນ 2010.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ນະໂຍບາຍ ສົ່ງເສີມການລົງທຶນໃນເຂດພິເສດບໍ່ເຕ່ນແດນຄຳ ໃຫ້ເປັນຕົວເມືອງໃໝ່ທີ່ທັນສະໄໝ ແລະ ຍືນຍົງ, ເຮັດໃຫ້ຈຸດປະສົງຄາດໝາຍທີ່ກຳນົດໄວ້ໃນສັນຍາລະຫວ່າງ ລັດຖະບານ ກັບ ຜູ້ພັດທະນາ ປະກົດຜົນເປັນຈິງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ອາຍຸຂອງ ເຂດເສດຖະກິດພິເສດ ບໍ່ເຕ່ນແດນຄໍາ**

2.1 ເຂດເສດຖະກິດພິເສດ ບໍ່ເຕ່ນແດນຄໍາ ຊຶ່ງຕໍ່ໄປນີ້ເອີ້ນຫຍໍ້ວ່າ ***"ຂສພບ"***, ມີທີ່ຕັ້ງຢູ່ ເມືອງຫຼວງນໍ້າທາ, ແຂວງຫຼວງນໍ້າທາ, ຊຶ່ງລັດຖະບານຈັດສັນໃຫ້ໃນເນື້ອທີ່ດິນຈໍານວນໜຶ່ງພັນຫົກຮ້ອຍສີ່ສິບ (1,640) ເຮັກຕາ ຕາມໃບອະນຸຍາດລົງທຶນ ສະບັບເລກທີ 084/ຄລຮ, ລົງວັນທີ 20/08/2004 ໂດຍຜູ້ພັດທະນາຈະພັດທະນາຕາມຄວາມສາມາດຕົວຈິງໃນແຕ່ລະປີ.

2.2 ເຂດເສດຖະກິດພິເສດບໍ່ເຕ່ນແດນຄໍາ ມີອາຍຸ 99 ປີ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009 ໂດຍເລີ່ມແຕ່ມື້ໄດ້ລົງນາມໃນສັນຍາລະຫວ່າງ ລັດຖະບານ ກັບບໍລິສັດ (ວັນທີ 09 ທັນວາ 2003) ເປັນຕົ້ນໄປ.

**ມາດຕາ 3 ທີ່ຕັ້ງ ພາລະບົດບາດ**

**ຂສພບ** ເປັນເຂດພັດທະນາໜຶ່ງ, ຊຶ່ງເຄື່ອນໄຫວຢ່າງເປັນເອກະລາດທາງດ້ານເສດຖະກິດ ຕາມຈຸດປະສົງທີ່ກໍານົດໄວ້ໃນມາດຕາ 1 ຂອງດໍາລັດສະບັບນີ້, ໂດຍຂຶ້ນກັບການຊີ້ນໍາ-ນໍາພາໂດຍກົງຂອງລັດຖະບານ ແລະ ການຄຸ້ມຄອງຂອງອໍານາດການປົກຄອງແຂວງຫຼວງນໍ້າທາ, ມີພາລະບົດບາດ ເຄື່ອນໄຫວດ້ານທຸລະກິດ, ບໍລິການ, ການລົງທຶນ ແລະ ການບໍລິຫານຕາມສັນຍາ ແລະ ລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບ ຂສພບ**

ລັດ ມີນະໂຍບາຍສົ່ງເສີມທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນ **ຂສພບ** ດ້ວຍການມອບສິດໃຫ້ **ຂສພບ** ພິຈາລະນາຕົກລົງ ກ່ຽວກັບການລົງທຶນ, ການດໍາເນີນທຸລະກິດ, ລາຍຮັບ-ລາຍຈ່າຍ ແລະ ອື່ນໆ ຕາມດໍາລັດສະບັບນີ້ ແລະ ສັນຍາລະຫວ່າງລັດຖະບານກັບບໍລິສັດ ຟອກຣິງ ອຸດສາຫະກໍາ.

**ມາດຕາ 5 ຫຼັກການເຄື່ອນໄຫວພື້ນຖານຂອງ ຂສພບ**

**ຂສພບ** ເຄື່ອນໄຫວຕາມລະບຽບຫຼັກການທີ່ກໍານົດໄວ້ໃນ ໝວດທີ 5 ພາກທີ III ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປີ 2009, ຊຶ່ງມີຫຼັກການຕົ້ນຕໍ ດັ່ງນີ້:

1. **ຂສພບ** ສ້າງຕັ້ງຂຶ້ນ ໃນຂອບເຂດດິນແດນຂອງ ສປປ ລາວ, ລັດຖະບານແຫ່ງ ສປປ ລາວ ເປັນຜູ້ຊີ້ນໍາ ແລະ ຄຸ້ມຄອງໂດຍກົງຕໍ່ການເຄື່ອນໄຫວຂອງ **ຂສພບ** ບົນພື້ນຖານລະບຽບ, ກົດໝາຍ ແລະ ລັດຖະທໍາມະນູນຂອງ ສປປ ລາວ;
2. ເປັນເຈົ້າຕົນເອງທາງດ້ານເສດຖະກິດ ການເງິນລາຍຮັບ-ລາຍຈ່າຍບໍລິຫານ:
3. ຮັບປະກັນຄວາມສະເໝີພາບ ລະຫວ່າງການລົງທຶນພາຍໃນ ກັບຕ່າງປະເທດ ພາຍໃນຂອບ

ເຂດ **ຂສພບ;**

4. ພັດທະນາເຂດຕາມກົນໄກທັນເປັນຕົວເມືອງໃໝ່ທີ່ທັນສະໄໝ, ສ້າງຊຸມຊົນໃໝ່ສີວິໄລ ແລະ ຮັບປະກັນສິ່ງແວດລ້ອມໃຫ້ຍືນຍົງ;
5. ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສາມັກຄີປອງດອງ ແລະ ເສີມສ້າງວັດທະນະທຳອັນດີງາມຂອງຊາດລາວ;
6. ປະຕິບັດສັນຍາສຳປະທານ ລະຫວ່າງ **ລັດຖະບານ** ກັບບໍລິສັດ**ຜູ້ພັດທະນາ** ຕາມດຳລັດສະບັບນີ້, ລະບຽບກົດໝາຍ ແລະ ສົນທິສັນຍາສາກົນ ທີ່ ສ ປປ ລາວ ເປັນພາຄີ ຢ່າງເຂັ້ມງວດ.

**ມາດຕາ 6 ສິດ ແລະ ພັນທະຂອງຜູ້ທີ່ຢູ່ອາໄສໃນ ຂສພບ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທີ່ດຳລົງຊີວິດຢູ່ໃນ **ຂສພບ** ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ ແລະ ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ຄະນະບໍລິຫານ **ຂສພບ;** ເຂົ້າຮ່ວມ, ໃຫ້ຄວາມຮ່ວມມື, ເຄົາລົບ ແລະ ປະຕິບັດຕາມດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງຂອງ **ຂສພບ.** ຜູ້ອາໄສໃນ **ຂສພບ** ໄດ້ຮັບນະໂຍບາຍສົ່ງເສີມຕ່າງໆ ຄືກັນກັບຜູ້ລົງທຶນຢູ່ໃນເຂດ.

**ມາດຕາ 7 ການພົວພັນສາກົນ**

ລັດສົ່ງເສີມໃຫ້ **ຂສພບ** ດຶງດູດຜູ້ລົງທຶນຕ່າງປະເທດ ຕາມກົດໝາຍສົ່ງເສີມການລົງທຶນ ສປປ ລາວ ເພື່ອເຂົ້າມາລົງທຶນໃນເຂດຂອງຕົນ, ທັງເປີດກວ້າງຕະຫຼາດ, ແລກປ່ຽນແຮງງານ, ວັດຖຸດິບ, ເຕັກໂນໂລຊີ, ການເງິນ, ການຄ້າ, ການສົ່ງສິນຄ້າ, ການເຂົ້າອອກ-ເມືອງ, ພົວພັນກັບບໍລິສັດຕ່າງ ປະເທດເພື່ອເຊື່ອມໂຍງເຂົ້າ ໃນພາກພື້ນ ແລະ ສາກົນ ບົນພື້ນຖານລະບຽບກົດໝາຍ ຂອງ ສປປ ລາວ.

## ໝວດທີ II
## ນະໂຍບາຍສົ່ງເສີມ

**ມາດຕາ 8 ຂສພບ ໄດ້ຮັບນະໂຍບາຍສົ່ງເສີມ ດັ່ງນີ້:**

8.1 ເຂດເສດຖະກິດພິເສດຢູ່ ສປປ ລາວ, ນັບທັງເຂດ **ຂສພບ** ເປັນຫົວໜ່ວຍບໍລິຫານນ້ອຍ ແຕ່ສັງຄົມ ກວ້າງ, ມີສິດເຄື່ອນໄຫວຕາມທີ່ໄດ້ກຳນົດໄວ້ໃນໝວດທີ 5 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

8.2 ລັດຖະບານມອບສິດຮອບດ້ານໃຫ້ ຄະນະບໍລິຫານ **ຂສພບ** ໃນການພັດທະນາ ແລະ ຄຸ້ມຄອງເຂດ;

8.3 ປະຕິບັດນະໂຍບາຍການບໍລິການປະຕູດຽວໃນການດຶງດູດ ແລະ ອະນຸມັດການລົງທຶນດ້ວຍ

ຕົນເອງ;

8.4 ເປັນຜູ້ກຳນົດຄ່າເຊົ່າທີ່ດິນ, ອະສັງຫາລິມະຊັບ ແລະ ອື່ນໆ ໃນເຂດດ້ອຍຕົນເອງ;

8.5 ໄດ້ຮັບການພິຈາລະນາຍ້ອງຍໍສັນລະເສີນຈາກລັດຖະບານ.

**ມາດຕາ 9 ຜູ້ລົງທຶນທີ່ມາລົງທຶນໃນ ຂສພບ ຈະໄດ້ຮັບນະໂຍບາຍຕ່າງໆ ດັ່ງນີ້:**

9.1 ໄດ້ຮັບນະໂຍບາຍພິເສດດ້ານອັດຕາພາສີ-ອາກອນໂດຍອີງຕາມຂະແໜງການ, ກິດຈະການ, ຂະໜາດຂອງການລົງທຶນ ເປັນຕົ້ນ:

ກ). ປະຕິບັດອັດຕາອາກອນຕົວເລກທຸລະກິດ ຫຼື ອາກອນມູນຄ່າເພີ່ມ ໃນອັດຕາສູງສຸດບໍ່ເກີນ 10%;

ຂ). ອາກອນຊົມໃຊ້ ໃນອັດຕາສູງສຸດບໍ່ເກີນ 70%;

ຄ). ອາກອນກຳໄລ ໃນອັດຕາສູງສຸດບໍ່ເກີນ 20%;

ງ). ອາກອນເງິນເດືອນ ໃນອັດຕາສູງສຸດບໍ່ເກີນ 7%;

ຈ). ປະຕິບັດອັດຕາອາກອນເງິນເດືອນຂອງພະນັກງານ, ຊ່ຽວຊານ ແລະ ກຳມະກອນທີ່ເຮັດວຽກຢູ່ພາຍໃນ **ຂສພບ** ໃຫ້ລັດ ຕາມລະບຽບກົດໝາຍ;

ສ) ໄດ້ຮັບການຍົກເວັ້ນພາສີ-ອາກອນ ການນຳເຂົ້າ ກົນຈັກ, ວັດຖຸດິບ, ອຸປະກອນ ແລະ ພາຫະນະຮັບໃຊ້ເຂົ້າໃນການຜະລິດໂດຍກົງ ຂອງວິສາຫະກິດທີ່ລົງທຶນຢູ່ພາຍໃນ **ຂສພບ**;

9.2 ໄດ້ຮັບນະໂຍບາຍສົ່ງເສີມດ້ວຍສິດໃຊ້ທີ່ດິນ ແລະ ກຳມະສິດກ່ຽວກັບອະສັງຫາລິມະຊັບອື່ນ ຕາມມາດຕາ 58 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

9.3 ຜູ້ລົງທຶນ ແລະ ຄອບຄົວ ໄດ້ຮັບສິດໃນການຢູ່ອາໃສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 67 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

9.4 ໄດ້ຮັບສິດໃນການວ່າຈ້າງແຮງງານ ຕາມມາດຕາ 66 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

9.5 ໄດ້ຮັບການອຳນວຍຄວາມສະດວກໃນການສະໜອງຂໍ້ມູນຂ່າວສານກ່ຽວກັບການລົງທຶນ ແລະ ອື່ນໆ;

9.6 ໄດ້ຮັບການຍ້ອງຍໍສັນລະເສີນຈາກລັດຖະບານ ຕາມຜົນງານຂອງຜູ້ລົງທຶນ;

**ມາດຕາ 10 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶໃນ ຂສພບ**

10.1 ລັດຖະບານ ຮັບຮູ້, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນໃນ **ຂສພບ** ຕໍ່ກັບການ

ລົງທຶນ ແລະ ຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 60, 61 ແລະ 62 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009.

10.2 ລັດຖະບານຮັບຮູ້, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ພັດທະນາຕາມສັນຍາ ແລະ ຕາມດຳລັດສະບັບນີ້.

## ໝວດທີ III

## ການພັດທະນາ, ການລົງທຶນ ແລະ ການເຄື່ອນໄຫວພາຍໃນ ຂສພບ

### ມາດຕາ 11 ການສ້າງແຜນແມ່ບົດຂອງ ຂສພບ

ຄະນະບໍລິຫານ **ຂສພບ** ແລະ ສະພາບໍລິຫານເສດຖະກິດເປັນຜູ້ຄົ້ນຄວ້າ ແລະ ສ້າງແຜນແມ່ບົດພັດທະນາ **ຂພສຄ** ເປັນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ, ຊຶ່ງປະກອບດ້ວຍແຜນພັດທະນາ ແລະ ນຳໃຊ້ທີ່ດິນ, ພື້ນຖານໂຄງລ່າງ, ແຜນຜັງພັດທະນາ, ສ້າງເຂດຊຸມຊົນໃໝ່, ເຂດທ່ອງທ່ຽວ, ເຂດວັດທະນະທຳ, ການສຶກສາ, ສາທາລະນະສຸກ, ກະສິກຳ, ອຸດສາຫະກຳ, ແຜນຜະລິດສິນຄ້າການສົ່ງອອກ, ແຜນງົບປະມານປະຈຳປີ ແລະ ອື່ນໆ.

### ມາດຕາ 12 ການພັດທະນາພື້ນຖານໂຄງລ່າງ

12.1 ຜູ້ພັດທະນາ **ຂສພບ** ຕ້ອງດຳເນີນການກໍ່ສ້າງພື້ນຖານໂຄງລ່າງທັງໝົດ ເພື່ອອຳນວຍຄວາມສະດວກໃຫ້ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນເຂດ, ເຂດເຊື່ອມຕໍ່ ລະຫວ່າງ **ຂສພບ** ແລະ ທ້ອງຖິ່ນ, ເຂດປ່າສະຫງວນແຫ່ງຊາດຕາມແຜນແມ່ບົດການພັດທະນາ **ຂສພບ** ທີ່ລັດຖະບານ ໄດ້ຮັບຮອງເອົາ;

12.2 ພື້ນຖານໂຄງລ່າງທີ່ຈຳເປັນ ປະກອບມີ ທາງຫຼວງ, ທາງຊອຍ, ທາງເຊື່ອມຕໍ່ຂອງເຂດ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເສຍ, ກຳຈັດຂີ້ເຫຍື້ອ, ດ່ານເຂົ້າ-ອອກເມືອງ, ຕາໜ່າງພາຍໃນເຂດ, ພື້ນຖານໂຄງລ່າງດ້ານການສຶກສາ, ສາທາລະນະສຸກ, ວັດທະນະທຳ-ສັງຄົມ ແລະ ອື່ນໆ, ຊຶ່ງມີມາດຕະຖານລະດັບສູງ (ຫຼີກເວັ້ນການກໍ່ສ້າງຫຼຸດມາດຕະຖານລັດຖະບານກຳນົດ);

12.3 ແຫຼ່ງທຶນພັດທະນາພື້ນຖານໂຄງລ່າງ ໄດ້ມາຈາກ ຜູ້ພັດທະນາ ແລະ ລາຍຮັບໃໝ່ທີ່ເກີດຂຶ້ນຢູ່ພາຍໃນເຂດ ຕາມສັດສ່ວນການແບ່ງປັນງົບປະມານ ທີ່ໄດ້ກຳນົດໄວ້ ໃນມາດຕາ 24 ຂອງດຳລັດສະບັບນີ້;

12.4 ມູນຄ່າການລົງທຶນທີ່ນຳໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງທັງໝົດ ໄດ້ກຳນົດລະອຽດໃນສັນຍາ ລະຫວ່າງ ລັດຖະບານ ກັບຜູ້ພັດທະນາ, ແຕ່ໃນໄລຍະຕົ້ນບໍ່ຫຼຸດ 500 ລ້ານໂດລາສະຫະລັດ.

**ມາດຕາ 13 ປະເພດກິດຈະການການລົງທຶນໃນ ຂສພບ**

1. ອຸດສາຫະກຳເພື່ອສົ່ງອອກ;
2. ສູນການຄ້າ, ສາງ, ຮ້ານຄ້າ, ເຂດປອດພາສີ;
3. ການກໍ່ສ້າງຕົວເມືອງໃໝ່, ບ້ານພັດທະນາ ແລະ ບ້ານຈັດສັນ;
4. ທະນາຄານ;
5. ກະສິກຳສະອາດ, ອຸດສາຫະກຳສະອາດ, ເຕັກໂນໂລຊີ, ການຄົ້ນຄວ້າທົດລອງ;
6. ສະໜາມກ໊ອຟ;
7. ແຫຼ່ງທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ;
8. ໂຮງຮຽນ, ໂຮງໝໍ, ຫໍວັດທະນະທຳ, ວັດ, ສວນສາທາລະນະ;
9. ກາຊີໂນ (ໂດຍມີດຳລັດຄຸ້ມຄອງຕ່າງຫາກສະເພາະ);
10. ກິດຈະການປະເພດອື່ນໆ ທີ່ລັດຖະບານອະນຸມັດໃຫ້ລົງທຶນ.

**ມາດຕາ 14 ປະເພດກິດຈະການທີ່ໄດ້ຮັບການສົ່ງເສີມ**

ຂະແໜງທຸລະກິດທີ່ໄດ້ຮັບການສົ່ງເສີມໃນ **ຂສພບ** ປະກອບດ້ວຍກິດຈະການຕ່າງໆເປັນຕົ້ນ: ອຸດສາຫະກຳເອເລັກໂຕຣນິກ, ອຸປະກອນກໍ່ສ້າງທັນສະໄໝ, ໂຄງລ່າງແຫຼ່ງທ່ອງທ່ຽວ,ການຜະລິດ-ປຸງແຕ່ງກະສິກຳສະອາດ, ຜະລິດຕະພັນປອດສານພິດ, ຂະແໜງການຜະລິດເພື່ອສົ່ງອອກ, ການປູກຕົ້ນໄມ້ໃຫ້ເປັນປ່າ, ໂຮງຮຽນ, ໂຮງໝໍ, ວັດ, ສວນສາທາລະນະ.

ປະເພດກິດຈະການດັ່ງກ່າວ ຄະນະບໍລິຫານ **ຂສພບ** ເປັນຜູ້ພິຈາລະນາກ່ຽວກັບການຍົກເວັ້ນ ຫຼືຫຼຸດຜ່ອນພາສີ-ອາກອນ, ຄ່າເຊົ່າທີ່ດິນ ແລະ ຄ່າບໍລິການອື່ນໆທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃນການດຳເນີນການພັດທະນາກິດຈະການດັ່ງກ່າວ ໃຫ້ເປັນຈິງ.

**ມາດຕາ 15 ສິດ ແລະ ພັນທະຂອງຜູ້ລົງທຶນໃນ ຂສພບ**

ຜູ້ລົງທຶນ ໃນ **ຂສພບ** ຕ້ອງປະຕິບັດຕາມ ທີ່ໄດ້ກຳນົດໄວ້ໃນ ມາດຕາ 63 ຫາ 70 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປີ 2009, ຕາມດຳລັດສະບັບນີ້ ແລະ ຕາມລະບຽບການ ຂອງ **ຂສພບ.**

**ມາດຕາ 16 ສິດ ແລະ ພັນທະ ຂອງ ຜູ້ພັດທະນາ ຂສພບ**

ຜູ້ພັດທະນາແມ່ນ ຜູ້ລົງທຶນລາຍໃຫຍ່ ເຂົ້າໃນການພັດທະນາພື້ນຖານໂຄງລ່າງ ຊຶ່ງໃນດຳລັດສະບັບນີ້ ແມ່ນກຸ່ມບໍລິສັດ ຟອກຮີງ ອຸດສາຫະກຳ ຈຳກັດ, ສິດ ແລະ ພັນທະຕົ້ນຕໍມີດັ່ງນີ້:

16.1 ປະຕິບັດຕາມ ມາດຕາ 63 ຫາ 70 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປີ 2009, ດຳລັດສະບັບນີ້ ແລະ ລະບຽບການຂອງ **ຂສພບ;**

16.2 ສັນຍາລະຫວ່າງ ລັດຖະບານ ກັບ ຜູ້ພັດທະນາ.

16.3 ເກັບກູ້ທຶນຄືນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23.3 ຂອງດຳລັດສະບັບນີ້.

**ມາດຕາ 17 ການສະເໜີການລົງທຶນໃນ ຂສພບ**

ຜູ້ມີຈຸດປະສົງລົງທຶນຢູ່ **ຂສພບ** ຕ້ອງໄດ້ປະກອບຄຳຮ້ອງການລົງທຶນ ຕາມແບບພິມທີ່ກຳນົດອອກໂດຍສະພາບໍລິຫານເສດຖະກິດ **ຂສພບ.**

ຜູ້ລົງທຶນສາມາດຍື່ນແບບພິມຄຳຮ້ອງການລົງທຶນໂດຍຜ່ານແຟັກ, ຈົດໝາຍອີເລັກໂຕຣນິກ ຫຼື ຍື່ນໂດຍກົງຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂອງສະພາບໍລິຫານເສດຖະກິດ **ຂສພບ.**

**ມາດຕາ 18 ການບໍລິການການລົງທຶນປະຕູດຽວ**

ການບໍລິການການລົງທຶນປະຕູດຽວ ໃຫ້ປະຕິບັດຕາມ ມາດຕາ 44, 45 ແລະ 46 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009.

ສະພາບໍລິຫານ **ຂສພບ** ສ້າງຕັ້ງຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ການອອກໃບທະບຽນວິສາຫະກິດ, ການສະໜອງຂໍ້ມູນຂ່າວສານ, ການບໍລິການການລົງທຶນ ແລະ ການບໍລິການດ້ານອື່ນໆ.

**ມາດຕາ 19 ການນຳເຂົ້າ-ສົ່ງອອກ**

ທຸກການນຳເຂົ້າສິນຄ້າ, ອຸປະກອນ, ພາຫະນະ, ກົນຈັກ, ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ (ຍົກເວັ້ນນ້ຳມັນເຊື້ອໄຟ) ເພື່ອມານຳໃຊ້ພາຍໃນ **ຂສພບ** ຈະໄດ້ຮັບນະໂຍບາຍດ້ານພາສີ-ອາກອນ ຕາມຂໍ້ກຳນົດສະເພາະ ຂອງ **ຂສພບ.**

ການນຳເຂົ້າສິນຄ້າຮັບໃຊ້ພາຍໃນເຂດທັງໝົດ ໃຫ້ປະຕິບັດຕາມລະບຽບການສະເພາະຂອງເຂດ, ສ່ວນການນຳເອົາສິນຄ້າດັ່ງກ່າວ ອອກຈາກ **ຂສພບ** ເພື່ອສົ່ງອອກໄປຍັງພາຍໃນປະເທດ ຕ້ອງປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ.

ສະພາບໍລິຫານເສດຖະກິດ **ຂສພບ** ເປັນຜູ້ຢັ້ງຢືນ ແລະ ລາຍງານການນຳເຂົ້າ-ສົ່ງອອກຕໍ່ ຄະນະບໍລິຫານເຂດ ແລະ ລັດຖະບານ ເປັນປົກກະຕິສາມເດືອນ, ຫົກ ເດືອນ ແລະ ໜຶ່ງປີ.

**ມາດຕາ 20 ການເຂົ້າ-ອອກ ຂສພບ**

ການເຂົ້າ-ອອກ **ຂສພບ** ຕ້ອງໄດ້ຜ່ານການກວດກາຂອງດ່ານ ຕາມຈຸດທີ່ລັດຖະບານກຳນົດໄວ້.

**ມາດຕາ 21 ການປົກປັກຮັກສາສິ່ງແວດລ້ອມ**

ຄະນະບໍລິຫານ **ຂສພບ** ເປັນຜູ້ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາສະພາບແວດລ້ອມ ແລະ ຊັບພະຍາກອນທຳມະຊາດໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ

ແລະ ຮັບປະກັນການພັດທະນາແບບຍືນຍົງ.

**ມາດຕາ 22 ການພົວພັນກັບພາຍນອກ**

22.1 ລັດຖະບານອະນຸຍາດໃຫ້ **ຂສພບ** ເຄື່ອນໄຫວພົວພັນກັບບໍລິສັດ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງຄະນະບໍລິຫານ **ຂພສຄ**;

22.2 ຂະແໜງການຕ່າງໆຂອງສູນກາງ ແລະ ແຂວງບໍ່ແກ້ວ ມີໜ້າທີ່ ອໍານວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອ, ຮ່ວມມື ແລະ ຄໍາແນະນໍາ ເພື່ອໃຫ້ **ຂສພບ** ເຄື່ອນໄຫວສະດວກຕາມນະໂຍບາຍ ແລະ ລະບຽບການພົວພັນຮ່ວມມືກັບຕ່າງປະເທດຂອງລັດຖະບານ ສປປ ລາວ.

## ໝວດທີ IV
## ການເງິນ ແລະ ງົບປະມານຂອງ ຂສພບ

**ມາດຕາ 23 ການເງິນຂອງ ຂສພບ**

1. **ຂສພບ** ເປັນຫົວໜ່ວຍແຜນການ ແລະ ການເງິນພິເສດ, ເພິ່ງຕົນເອງ ແລະ ກຸ້ມຕົນເອງ, ປະຕິບັດພັນທະ ຕໍ່ລັດຖະບານ ຕາມສັນຍາ ແລະ ດໍາລັດສະບັບນີ້;

2. ການຊໍາລະສະສາງພາຍໃນເຂດ ໃຫ້ນໍາໃຊ້ສະກຸນເງິນກີບ, ການຊໍາລະສະສາງກັບຕ່າງປະເທດໃຫ້ປະຕິບັດຕາມສັນຍາກັບຄູ່ຮ່ວມມື ແຕ່ໃຫ້ທຽບຄ່າເປັນເງິນກີບ;

3. ທະນາຄານ ສປປ ລາວ ເປັນຜູ້ກວດກາຄຸ້ມຄອງການຈໍລະຈອນເງິນຕາ ໃນເຂດຕາມລະບຽບກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 24 ງົບປະມານ ຂສພບ**

**ຂສພບ** ມີລະບົບງົບປະມານເປັນຂອງຕົນເອງ ໂດຍແມ່ນກອງປະຊຸມຄະນະບໍລິຫານ **ຂສພບ** ແລະ ສະພາບໍລິຫານເສດຖະກິດ ເປັນຜູ້ພິຈາລະນາຕົກລົງ.

24.1 ລາຍຮັບຂອງ **ຂສພບ** (ແມ່ນລາຍຮັບທີ່ເກີດຂຶ້ນໃນເຂດ, ໂດຍຫັກພັນທະຕາມສັນຍາໃຫ້ລັດຖະບານ) ມາຈາກ:

1. ການໃຫ້ສິດໃຊ້ ຫຼື ການໃຫ້ເຊົ່າທີ່ດິນ ທີ່ໄດ້ພັດທະນາແລ້ວ ຕາມຂອບເຂດທີ່ດິນຂອງລັດທີ່ເຂົ້າເປັນຮຸ້ນ ລວມທັງທີ່ດິນທີ່ໄດ້ຮັບຈາກພາກສ່ວນອື່ນ, ຊຶ່ງໄດ້ຊົດເຊີຍແລ້ວ;
2. ການຂາຍ ຫຼື ໃຫ້ເຊົ່າອະສັງຫາລິມະຊັບອື່ນໆ;
3. ຄ່າບໍລິການ ແລະ ຄ່າທໍານຽມການລົງທຶນ, ສະແຕັມອາກອນດ້ານຕ່າງໆ ແລະ ການບໍລິການດ້ານວິຊາການອື່ນໆ ຕາມທີ່ລັດຖະບານກໍານົດໄວ້;
4. ລາຍຮັບພາສີ-ອາກອນ ທີ່ເກີດຂຶ້ນໃນເຂດ (ຍົກເວັ້ນ ພາສີ-ອາກອນ ນໍາເຂົ້າ ສປປ ລາວ);
5. ເງິນປັບໃໝຈາກການຄໍ້າປະກັນການລົງທຶນໃນເຂດ;

6. ລາຍຮັບຈາກກາຊີໂນ, ໂຮງແຮມ, ຮ້ານຊັບພະສິນຄ້າ, ກິດຈະການອື່ນ;

7. ການຊື້-ຂາຍ ຮຸ້ນ ທາງກົງ ຫຼື ທາງອ້ອມ ທັງພາຍໃນ ແລະ ຕ່າງປະເທດ;

8. ລາຍຮັບອື່ນ ຕາມການຕົກລົງຂອງລັດຖະບານ.

24.2 ລາຍຈ່າຍ ຂອງ **ຂສພບ** ປະກອບດ້ວຍ:

1. ຈ່າຍການລົງທຶນພັດທະນາພື້ນຖານໂຄງລ່າງ;

2. ຈ່າຍຄ່າຄຸ້ມຄອງ ບໍລິຫານ ຂອງ **ຂສພບ;**

3. ຈ່າຍເງິນເດືອນ, ບໍານເນັດ, ບໍານານ (ພະນັກງານລັດ ແລະ ພະນັກງານຂອງ **ຂສພບ**);

4. ຈ່າຍສະຫວັດດີການສັງຄົມ (ພະນັກງານລັດ, ພະນັກງານຂອງ **ຂສພບ** ແລະ ພະນັກງານ ຕາມສັນຍາ);

5. ຈ່າຍສາທາລະນະປະໂຫຍດທີ່ຈໍາເປັນ ສໍາລັບເຂດດັ່ງກ່າວ: ໄຟຟ້າ, ນໍ້າປະປາ, ສະຖານີລົດເມ, ການທໍາຄວາມສະອາດຕົວເມືອງ, ສວນສາທາລະນະ, ການປູກຕົ້ນໄມ້ແຄມທາງ ແລະ ອື່ນໆ;

6. ຈ່າຍຄ່າອຸບັດຕິເຫດ ຕ່າງໆ;

7. ຄັງສະສົມ ຂອງ **ຂສພບ.**

- ສໍາລັບສັດສ່ວນແຕ່ລະລາຍຈ່າຍ ແມ່ນກອງປະຊຸມຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ **ຂສພບ** ເປັນຜູ້ຕົກລົງ;
- ສໍາລັບເງິນເດືອນ, ບໍານເນັດ, ບໍານານ ຂອງພະນັກງານລັດ ທີ່ປະຈໍາການຢູ່ **ຂສພບ** ນັ້ນ ຕ້ອງສູງກວ່າ ຫຼື ບໍ່ໃຫ້ຫຼຸດອັດຕາເງິນເດືອນ, ບໍານເນັດ, ບໍານານ ຂອງພະນັກງານ ສັງກັດລັດ ໃນແຕ່ລະໄລຍະ ແລະ ຂຶ້ນກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ຂອງ **ຂສພບ.**

24.3 ອັດຕາສ່ວນການແບ່ງປັນ ລາຍຮັບ-ລາຍຈ່າຍ (ງົບປະມານ) ລະຫວ່າງ ລັດຖະບານ ກັບຜູ້ພັດທະນາໃຫ້ດໍາເນີນການຕາມລະບຽບການຖືຮຸ້ນ, ຊຶ່ງຄິດໄລ່ຕົວຈິງໃນແຕ່ລະໄລຍະ 5 ປີ, 10 ປີ, 20 ປີ, 50 ປີ... ແລະ ໃຫ້ກໍານົດລະອຽດໃນສັນຍາເພີ່ມເຕີມ ລະຫວ່າງ ລັດຖະບານກັບ ບໍລິສັດ ຟອກຮິງ ອຸດສາຫະກໍາ ຈໍາກັດ.

24.4 ງົບປະມານໃຊ້ຈ່າຍ ໃນການຄຸ້ມຄອງບໍລິຫານໃນໄລຍະຕົ້ນ ຂອງຄະນະບໍລິຫານ **ຂສພບ** ໄດ້ມາຈາກຜູ້ພັດທະນາ ຊຶ່ງຈະໄດ້ກໍານົດໄວ້ໃນສັນຍາເພີ່ມເຕີມ ລະຫວ່າງ ລັດຖະບານ ກັບ ບໍລິສັດ ຟອກຮິງ ອຸດສາຫະກໍາ ຈໍາກັດ.

**ມາດຕາ 25 ການແບ່ງປັນຜົນປະໂຫຍດ ລະຫວ່າງ ລັດ ກັບ ຜູ້ພັດທະນາ:**

**25.1 ຜົນປະໂຫຍດຂອງລັດຖະບານ:**

1. ຄ່າສໍາປະທານ ແຕ່ລະໄລຍະ 5 ປີ, 10 ປີ, 20 ປີ, 50 ປີ... (ທາງກົງ) ແລະ ອັນໃດບໍ່ແຈ້ງໃຫ້

ກຳນົດລະອຽດໃນສັນຍາເພີ້ມເຕີມ ລະຫວ່າງ ລັດຖະບານ ກັບ ບໍລິສັດ ຟອກຣິງ ອຸດສາຫະກຳ ຈຳກັດ.

2. ຄ່າຊັບພະຍາກອນທຳມະຊາດ ການນຳໃຊ້ປ່າສະຫງວນ, ລິຂະສິດອື່ນໆ ຂອງລັດຖະບານທີ່ **ຂສພບ** ນຳໃຊ້.
3. ໝາກຜົນການພັດທະນາທັງໝົດພື້ນຖານໂຄງລ່າງ, ເຂດເຊື່ອມຕໍ່, ລວມຍອດຜະລິດຕະພັນພາຍໃນ (GDP) ຂອງທ້ອງຖິ່ນ (ທາງອ້ອມ).
4. ການຂະຫຍາຍໂອກາດວຽກເຮັດງານທຳຂອງປະຊາຊົນ, ສືບທອດວັດທະນະທຳອັນດີງາມຂອງ ສັງຄົມ-ຊຸມຊົນ.
5. ເມື່ອສິ້ນສຸດອາຍຸສັນຍາແລ້ວ ສິ່ງປຸກສ້າງ, ອຸປະກອນທັງໝົດຂອງ **ຂອພບ** ຈະຕົກເປັນກຳມະສິດຂອງລັດຖະບານ, ຍົກເວັ້ນອາຄານເພື່ອຢູ່ອາໃສ ແລະ ກິດຈະການທີ່ເປັນຂອງສ່ວນຕົວຂອງຄົນລາວ, ຄົນຕ່າງປະເທດ ທີ່ໄດ້ສັນຊາດລາວ ຫຼື ພົນລະເມືອງລາວກົດຕົມະສັກ.

**25.2 ຜົນປະໂຫຍດຂອງ ອົງການປົກຄອງແຂວງ:**

1. ຄ່ານຳໃຊ້ຊັບພະຍາກອນທຳມະຊາດ ໃນ **ຂສພບ** ( ບໍ່ໃຫ້ຫຼຸດ 5% ຂອງມູນຄ່າຊັບພະຍາກອນທຳມະຊາດ);
2. 30% ຂອງລາຍຮັບທັງໝົດທີ່ລັດຖະບານໄດ້ ມາຈາກການຈ່າຍຄ່າມອບເໝົາຂອງຜູ້ພັດທະນາ **ຂສພບ**;
3. ຄ່າບໍລິການດ້ານວິຊາການ ຕາມທີ່ລັດຖະບານກຳນົດໄວ້ໃນເວລາທີ່ອົງການປົກຄອງ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງຂອງແຂວງຫຼວງນ້ຳທາ ບໍລິການໃຫ້ **ຂສພບ.**

**25.3 ຜົນປະໂຫຍດ ຂອງອົງການປົກຄອງເມືອງຫຼວງນ້ຳທາ:**

1. 30% ຂອງຄ່ານຳໃຊ້ຊັບພະຍາກອນທຳມະຊາດໃນ **ຂສພບ** ທີ່ອົງການປົກຄອງແຂວງໄດ້ຮັບ;
2. 30% ຂອງລາຍຮັບທັງໝົດ ທີ່ແຂວງຫຼວງນ້ຳທາໄດ້ຮັບການແບ່ງປັນຈາກລັດຖະບານ;
3. ຄ່າບໍລິການດ້ານວິຊາການ ຕາມລະບຽບກົດໝາຍ ທີ່ອົງການປົກຄອງເມືອງຫຼວງນ້ຳທາບໍລິການ ໃຫ້ **ຂສພບ.**

**25.4 ຜູ້ພັດທະນາ ຈະໄດ້ຮັບຜົນປະໂຫຍດດັ່ງນີ້:**

1. ລາຍຮັບທັງໝົດທີ່ເກີດຂຶ້ນໃນ **ຂສພບ** ພາຍຫຼັງທີ່ຜູ້ພັດທະນາໄດ້ປະຕິບັດພັນທະໃຫ້ແກ່ລັດຖະບານ ຄົບຖ້ວນຕາມສັນຍາ ໂດຍໃຫ້ກຳນົດລະອຽດໃນສັນຍາເພີ່ມເຕີມ ລະຫວ່າງລັດຖະບານ ກັບ ບໍລິສັດ ຟອກຣິງ ອຸດສາຫະກຳ ຈຳກັດ;
2. ລາຍຮັບຈາກການຖືຮຸ້ນໃນກິດຈະການຕ່າງໆທີ່ເກີດຂຶ້ນໃໝ່ໃນ **ຂສພບ;**
3. ລາຍຮັບໃນການດຳເນີນທຸລະກິດ ບໍລິກາ, ການລົງທຶນ, ແລະ ລາຍຮັບອື່ນໆຕາມການຕົກລົງ

ຂອງລັດຖະບານ.

ສຳລັບສິດຜົນປະໂຫຍດ ແລະ ບັນຫາອື່ນໆທີ່ຍັງບໍ່ທັນກຳນົດຊັດເຈນໃນດຳລັດສະບັບນີ້ ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງສັນຍາເພີ່ມເຕີມຮ່ວມກັບ ບໍລິສັດ ຟອກຣິງ ອຸດສາຫະກຳ ຈຳກັດ ຕິດແນບໂດຍຖືເປັນເອກະສານສຳຄັນຂອງດຳລັດສະບັບນີ້.

# ໝວດທີ V
# ໂຄງປະກອບການຈັດຕັ້ງຂອງ ຂສພບ

## ມາດຕາ 26 ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງ **ຂສພບ** ປະກອບມີ:

- ຄະນະບໍລິຫານ **ຂສພບ** (Administration Board) ເປັນອົງການປົກຄອງ ບໍລິຫານລັດໃນ **ຂສພບ.**
- ສະພາບໍລິຫານເສດຖະກິດ **ຂສພບ** (Economic Management Board) ເປັນອົງການຄຸ້ມຄອງເສດຖະກິດ, ທຸລະກິດ, ການບໍລິການ **ຂສພບ.**

## ມາດຕາ 27 ຄະນະບໍລິຫານ ຂສພບ

ຄະນະບໍລິຫານ **ຂສພບ** ຂຶ້ນກັບການຊີ້ນຳໂດຍກົງ ແລະ ຖືກແຕ່ງຕັ້ງຈາກລັດຖະບາ, ຊຶ່ງປະກອບດ້ວຍ ຫົວໜ້າໜຶ່ງທ່ານ ແລະ ຮອງຫົວໜ້າຈຳນວນໜຶ່, ມີກົງຈັກການຈັດຕັ້ງຊ່ວຍວຽກ ແລະ ບຸກຄະລາກອນຈຳນວນໜຶ່ງ ເພື່ອປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນ (ຈຳນວນກົງຈັກ ແລະ ບຸກຄະລາກອນ ໃຫ້ອີງຕາມຄວາມຕ້ອງການແຕ່ລະໄລຍະ ແລະ ຄວາມສາມາດຕອບສະໜອງດ້ານງົບປະມານຂອງເຂດ).

## ມາດຕາ 28 ສະພາບໍລິຫານເສດຖະກິດ ຂສພບ

ສະພາບໍລິຫານເສດຖະກິດ **ຂສພບ** ປະກອບດ້ວຍປະທານໜຶ່ງທ່ານ ຊຶ່ງມາຈາກຝ່າຍຜູ້ພັດທະນາ, ຮອງປະທານ ສອງທ່ານ ທີ່ຖືກແຕ່ງຕັ້ງມາຈາກຝ່າຍລັດຖະບານ ແລະ ຜູ້ພັດທະນາຝ່າຍລະ ໜຶ່ງທ່ານ ແລະ ກຳມະການຈຳນວນໜຶ່ງ ໂດຍແມ່ນກອງປະຊຸມລະຫວ່າງສະພາບໍລິຫານເສດຖະກິດ ກັບ ຄະນະບໍລິຫານເຂດ ເປັນຜູ້ຮັບຮອງ.

## ມາດຕາ 29 ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານ ຂສພບ

1. ຄົ້ນຄວ້າ ແລະ ວາງແຜນຍຸດທະສາດດ້ານການປົກຄອງ, ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ໂດຍສອດຄ່ອງກັບແນວທາງນະໂຍບາຍປ້ອງກັນຊາດ-ປ້ອງກັນຄວາມສະ

ຫງັບຂອງພັກ ແລະ ລະບຽບກົດໝາຍການປົກຄອງ;

2. ຄົ້ນຄວ້າຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງພົນລະເມືອງ, ການເຂົ້າ-ອອກເມືອງ;
3. ຄົ້ນຄວ້ານະໂຍບາຍການພັດທະນາສັງຄົມ, ການສົ່ງເສີມການສຶກສາ, ສາທາລະນະສຸກ, ວັດທະນະທຳ, ການແກ້ໄຂບັນຫາທາງສັງຄົມ;
4. ຮັບປະກັນຄວາມສາມັກຄີ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳພາຍໃນ **ຂສພບ** ຕາມລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ;
5. ຈັດຕັ້ງການເກັບລາຍຮັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂໍ້ 3, 4 ແລະ 8 ຂອງດຳລັດສະບັບນີ້ ແລະ ລາຍຮັບຕາມສັນຍາ ລະຫວ່າງ ລັດຖະບານ ກັບ ບໍລິສັດຜູ້ພັດທະນາ;
6. ຮ່ວມກັບສະພາບໍລິຫານເສດຖະກິດ ແກ້ໄຂຂໍ້ຂັດແຍ້ງພາຍໃນ **ຂສພບ;**
7. ຮ່ວມກັບສະພາບໍລິຫານເສດຖະກິດ ປົກປັກຮັກສາສິ່ງແວດລ້ອມ ເພື່ອຮັບປະກັນການພັດທະນາແບບຍືນຍົງ;
8. ແນະນຳສະພາບໍລິຫານເສດຖະກິດ ໃນການປະຕິບັດສິດ ແລະ ໜ້າທີ່ຂອງສະພາດັ່ງກ່າວ;
9. ປະສານສົມທົບກັບອົງການປົກຄອງຂັ້ນເມືອງຂໍຄຳເຫັນຊີ້ນຳຈາກອົງການປົກຄອງແຂວງຫຼວງນ້ຳທາ;
10. ພົວພັນ ແລະ ຮ່ວມມືສາກົນຕາມສິດ ແລະ ໜ້າທີ່ຂອງຕົນ;
11. ສະຫຼຸບລາຍງານຜົນການເຄື່ອນໄຫວ ແລະ ສະເໜີຂໍຄຳເຫັນຊີ້ນຳຈາກອົງການປົກຄອງແຂວງ ແລະ ຂະແໜງການສາຍຕັ້ງຂອງສູນກາງ;
12. ມີສິດ ແລະ ໜ້າທີ່ອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງສະພາບໍລິຫານເສດຖະກິດ ຂສພບ**

1. ຄົ້ນຄວ້າ ແລະ ວາງແຜນພັດທະນາເສດຖະກິດ, ແຜນງານ ແລະ ໂຄງການການລົງທຶນໃນແຕ່ລະໄລຍະ 6 ເດືອນ, 1 ປີ, 5 ປີ, 20 ປີ;
2. ຄົ້ນຄວ້າ ລະບຽບການ ໃນການຄຸ້ມຄອງ ແລະ ບໍລິຫານເສດຖະກິດ;
3. ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຂອງ ສປປ ລາວ ສະບັບປີ 2009;
4. ຂຸດຄົ້ນລາຍຮັບ, ສ້າງ ແລະ ປະຕິບັດງົບປະມານ **ຂສພບ;**
5. ຈັດຕັ້ງການເກັບລາຍຮັບຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂໍ້ 1, 2, 5, 6 ແລະ 7 ຂອງດຳລັດສະບັບນີ້;
6. ສະໜອງຂໍ້ມູນຂ່າວສານ ພິຈາລະນາການລົງທຶນ ແລະ ປະເມີນຜົນການລົງທຶນ;
7. ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຫົວໜ່ວຍທຸລະກິດ;
8. ເປັນເຈົ້າການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຮ່ວມກັບຄະນະບໍລິຫານ **ຂສພບ;**
9. ມອບພັນທະໃຫ້ລັດຖະບານຕາມສັນຍາ ແລະ ດຳລັດສະບັບນີ້;

10. ສ້າງ ນຳໃຊ້ ແລະ ຄຸ້ມຄອງພະນັກງານ, ກຳມະກອນ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
11. ພັດທະນາການສຶກສາ, ສາທາລະນະສຸກ, ວັດທະນະທຳ-ສັງຄົມ;
12. ປົກປັກຮັກສາຄວາມສາມັກຄີພາຍໃນ ແລະ ພາຍນອກ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;
13. ປົກປັກຮັກສາສະພາບແວດລ້ອມ ເພື່ອຮັບປະກັນການພັດທະນາແບບຍືນຍົງ;
14. ຄຸ້ມຄອງຈັດສັນ ແລະ ນຳໃຊ້ທີ່ດິນ, ການປຸກສ້າງປະເພດຕ່າງໆ ໃຫ້ກົມກຽວ;
15. ລາຍງານ ຜົນຂອງການເຄື່ອນໄຫວປະຈຳໄຕມາດ, 6 ເດືອນ ແລະ ປະຈຳປີ ໃຫ້ແກ່ ລັດຖະບານ ແລະ ຄະນະບໍລິຫານ **ຂສພບ**;
16. ພົວພັນກັບບໍລິສັດ, ຫົວໜ່ວຍທຸລະກິດພາຍໃນ ແລະ ຕ່າງປະເທດຕາມລະບຽບກົດໝາຍ;
17. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 31 ການປະສານງານ ແລະ ເຮັດວຽກຂອງຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ**

1. ຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ ເຄື່ອນໄຫວຕາມ ສິດ ແລະ ໜ້າທີ່ ຂອງຕົນ ຕາມທີ່ກຳນົດໄວ້ໃນມາດຕາ 29 ແລະ 30 ຂອງດຳລັດສະບັບນີ້, ມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການປະຕິບັດສັນຍາ ແລະ ດຳລັດສະບັບນີ້, ເປັນຜູ້ຮັບຜິດຊອບຕໍ່ ລັດຖະບານ ແລະ ຄະນະພັກ-ອົງການປົກຄອງແຂວງຫຼວງນ້ຳທາ;
2. ກົນໄກການປະສານງານລະຫວ່າງ ຄະນະບໍລິຫານ **ຂສພບ** ກັບສະພາບໍລິຫານເສດຖະກິດ **ຂສພບ** ແມ່ນກອງປະຊຸມຮ່ວມ, ການພົບປະ, ການພິຈາລະນາຂໍ້ສະເໜີຂອງກັນ ແລະ ກັນ;
3. ກອງປະຊຸມຮ່ວມສະໄໝສາມັນ ລະຫວ່າງ ຫົວໜ້າຄະນະບໍລິຫານກັບປະທານສະພາບໍລິຫານເສດຖະກິດຈັດຂຶ້ນ ເດືອນລະໜຶ່ງຄັ້ງ ແລະ ສາມາດຈັດຕັ້ງກອງປະຊຸມວິສາມັນໄດ້ ຕາມການສະເໜີຂອງຄະນະໃດໜຶ່ງ ແລະ ກອງປະຊຸມດັ່ງກ່າວເປັນບ່ອນພິຈາລະນາຕັດສິນບັນຫາສຳຄັນຕ່າງໆຂອງ **ຂສພບ** (ແຜນພັດທະນາເຂດ, ງົບປະມານ, ການແຕ່ງຕັ້ງບຸກຄະລາກອນ, ການພົວພັນຮ່ວມມືກັບຕ່າງປະເທດ, ຂໍ້ຂັດແຍ້ງພາຍໃນເຂດ ແລະ ອື່ນໆ), ກອງປະຊຸມຮ່ວມພາຍໃຕ້ການເປັນປະທານຂອງຫົວໜ້າຄະນະບໍລິຫານເຂດ;
4. ທັງສອງອົງການມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ເຄົາລົບສິດ ແລະ ໜ້າທີ່ເຊິ່ງກັນ ແລະ ກັນ;
5. ກໍລະນີສອງຄະນະບໍ່ສາມາດຕົກລົງກັນໃນບັນຫາ ໃດໜຶ່ງ ໃຫ້ນຳສະເໜີ ແລະ ປະຕິບັດຕາມການຕົກລົງຂອງລັດຖະບານ.

## ໝວດທີ VI
## ການຄຸ້ມຄອງຂອງອົງການມະຫາພາກຕໍ່ ຂສພບ

### ມາດຕາ 32 ອົງການທີ່ມີສິດໜ້າທີ່ຄຸ້ມຄອງ ຂສພບ

1. ຄະນະພັກ **ຂສພບ** ຂຶ້ນກັບການຊີ້ນໍານໍາພາຂອງຄະນະປະຈໍາພັກ ແຂວງຫຼວງນໍ້າທາ;
2. ຄະນະບໍລິຫານເຂດ ແລະ ສະພາບໍລິຫານເສດຖະກິດ ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຮອບດ້ານຂອງລັດຖະບານ ແລະ ຂອງເຈົ້າແຂວງໆຫຼວງນໍ້າທາ;
3. ບັນດາກະຊວງ-ອົງການທຽບເທົ່າສາຍຕັ້ງ ມີຄວາມຮັບຜິດຊອບໃນວຽກງານ ແລະ ຄຸ້ມຄອງເຂດຕາມພາລະບົດບາດໜ້າທີ່ຂອງອົງການຕົນ.

### ມາດຕາ 33 ສິດ ແລະ ໜ້າທີ່ຂອງລັດຖະບານ

1. ເປັນຜູ້ອໍານວຍຄວບຄຸມຄວາມໝັ້ນຄົງ, ຄວາມປອດໄພ ແລະ ຊີ້ນໍາໂດຍກົງ ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບພາຍໃນ **ຂສພບ;**
2. ອອກນະໂຍບາຍ ແລະ ນິຕິກໍາຕ່າງໆ ທີ່ກ່ຽວພັນກັບການພັດທະນາ ແລະ ຄຸ້ມຄອງ **ຂສພບ;**
3. ແນະນໍາ ແລະ ຂົນຂວາຍນັກລົງທຶນລາຍໃຫຍ່ ເພື່ອມາລົງທຶນໃນ **ຂສພບ;**
4. ຕົກລົງໂຄງປະກອບການຈັດຕັ້ງ ແລະ ແຕ່ງຕັ້ງບຸກຄະລາກອນຂອງ **ຂສພບ** ແລະ ໜ້າທີ່ອື່ນໆຕາມລະບຽບກົດໝາຍກໍານົດ.

### ມາດຕາ 34 ສິດ ແລະ ໜ້າທີ່ຂອງກະຊວງ ແລະ ອົງການທຽບເທົ່າທີ່ກ່ຽວຂ້ອງ

1. ບັນດາກະຊວງ ແລະ ອົງການທຽບເທົ່າ ເປັນຜູ້ສະໜອງບັນດານະໂຍບາຍການສົ່ງເສີມ ແລະ ຄຸ້ມຄອງການດໍາເນີນກິດຈະການລົງທຶນ ໃນ **ຂສພບ** ທີ່ຕິດພັນກັບຂະແໜງການຕົນ;
2. ຕິດຕາມການຈັດຕັ້ງປະຕິບັດລະບຽບ ແລະ ກົດໝາຍ ໃນ **ຂສພບ** ທີ່ຂະແໜງການຕົນໄດ້ກໍານົດອອກ;
3. ປະກອບບຸກຄະລາກອນຊ່ວຍຝຶກອົບຮົມຕໍາແໜ່ງງານກ່ຽວຂ້ອງຕາມການສະເໜີຂອງ **ຂສພບ.**

### ມາດຕາ 35 ສິດ ແລະ ໜ້າທີ່ຂອງອົງການປົກຄອງແຂວງຫຼວງນໍ້າທາ

1. ຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມການເຄື່ອນໄຫວຂອງເຂດ;
2. ຕິດຕາມການປະຕິບັດສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ, ຂອງລັດ, ຂອງຜູ້ລົງທຶນ.
3. ເປັນຜູ້ອໍານວຍຄວາມສະດວກ ດ້ານຕ່າງໆໃຫ້ແກ່ການລົງທຶນ ລວມທັງ ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນເຂດທ້ອງຖິ່ນຂອງຕົນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 36. ສິດ ແລະ ໜ້າທີ່ຂອງເມືອງຫຼວງນ້ຳທາ**

1. ປະສານສົມທົບກັບຄະນະບໍລິຫານເຂດ ແລະ ສະພາບໍລິຫານເສດຖະກິດ ໃນການສ້າງແຜນພັດທະນາເຂດ ແລະ ເຂດອ້ອມຂ້າງໃຫ້ກົມກຽວ;
2. ອຳນວຍຄວາມສະດວກໃນການຈັດສັນທີ່ດິນ, ການຍົກຍ້າຍ ແລະ ການດຳລົງຊີວິດຂອງປະຊາຊົນບໍລິເວນອ້ອມຂ້າງເຂດຕາມແຜນຜັງທີ່ຮັບຮອງ;
3. ຈັດສັນ ແລະ ອົບຮົມວິຊາອາຊີບ, ປະກອບວຽກເຮັດງານທຳໃຫ້ປະຊາຊົນ ຕາມຄວາມຕ້ອງການພາຍໃນເຂດ;
4. ຄະນະພັກ, ອົງການປົກຄອງເມືອງຫຼວງນ້ຳທາ, ຄະນະພັກ, ຄະນະບໍລິຫານ **ຂສພບ** ມີສິດ ແລະ ໜ້າທີ່ເທົ່າທຽມກັນ, ເຄົາລົບນັບຖືຊຶ່ງກັນ ແລະ ກັນ, ຮັບຜິດຊອບຜົນໄດ້ຜົນເສຍຕໍ່ແຂວງ ແລະ ລັດຖະບານ ໃນການຈັດຕັ້ງປະຕິບັດສັນຍາ ແລະ ດຳລັດສະບັບນີ້.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງບ້ານອ້ອມຂ້າງ**

1. ປ້ອງກັນຄວາມສະຫງົບ, ຄວາມປອດໄພພາຍໃນເຂດ;
2. ສະໜັບສະໜູນການພັດທະນາ, ການລົງທຶນໃນເຂດ ຕາມດຳລັດ ແລະ ກົດໝາຍ;
3. ຊົມໃຊ້ ແລະ ປົກປັກຮັກສາພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກຕ່າງໆ ທີ່ພັດທະນາຂຶ້ນພາຍໃນເຂດ **ຂສພບ** ບົນພື້ນຖານລະບຽບຂອງເຂດ;
4. ສຶກສາອົບຮົມການຈັດຕັ້ງ ແລະ ປະຊາຊົນໃນຄວາມຮັບຜິດຊອບຂອງຕົນ ເພື່ອປະກອບອາຊີບ, ຂະຫຍາຍທຸລະກິດຂະໜາດນ້ອຍ ແລະ ກາງ ປີ່ນອ້ອມກິດຈະການຕ່າງໆຂອງເຂດ;
5. ປະຕິບັດສິດ ແລະ ໜ້າທີ່ຕ່າງໆ ຕາມທີ່ອົງການປົກຄອງເມືອງມອບໝາຍ.

**ມາດຕາ 38. ການຮັກສາຄວາມສະຫງົບໃນ ຂສພບ**

1. **ຂພສຄ** ມີຫ້ອງການ ປກຊ-ປກສ ອັນດຽວເຮັດໜ້າທີ່ຮັກສາຄວາມສະຫງົບຂອງ **ຂສພບ**, ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງ ແຂວງຫຼວງນ້ຳທາ ແລະ ຂຶ້ນກັບການຊີ້ນຳນຳພາໂດຍກົງ ຂອງຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາສະຫງົບ ແຂວງຫຼວງນ້ຳທາ, ໂດຍແມ່ນຫົວໜ້າຄະນະບໍລິຫານເຂດ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບເຂດ;
2. ສິດ ແລະ ໜ້າທີ່ຂອງຫ້ອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງ **ຂສພບ** ມອບໃຫ້ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງຫຼວງນ້ຳທາ ເປັນຜູ້ກຳນົດ;
3. ພົນລະເມືອງ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດໃນເຂດມີພັນທະທີ່ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງເຂດ ແລະ ກົດໝາຍຂອງ ສປປ ລາວກຳນົດໄວ້, ປະຕິບັດສັນຍາຂອງສອງລັດຖະບານ ລາວ-ຈີນ ໃນການປົກປັກຮັກສາຊາຍແດນ ແລະ ຄວາມສະຫງົບ, ເປັນລະບຽບຮຽບຮ້ອຍຂອງເຂດຊາຍແດນ.

### ມາດຕາ 39. ການນຳໃຊ້ ພາສາ ພາຍໃນ ຂສພບ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳລົງຊີວິດ ຫຼື ດຳເນີນທຸລະກິດ ຢູ່ພາຍໃນ **ຂສພບ** ໃຫ້ຖືເອົາພາສາລາວ ເປັນພາສາທາງລັດຖະການ, ພາສາຈີນ ແລະ ພາສາອັງກິດ ເປັນພາສາສາກົນ.

ສຳລັບການນຳໃຊ້ພາສາ ເພື່ອປະຊາສຳພັນ, ການຂຽນປ້າຍໂຄສະນາ, ປ້າຍຊື່ບໍລິສັດ, ປ້າຍອື່ນໆ ພາຍໃນ **ຂສພບ** ແມ່ນໃຫ້ຂຽນເປັນພາສາລາວຂຶ້ນເທິງສຸດ ແລະ ພາສາສາກົນອື່ນໆຕາມທີຫຼັງ.

## ໝວດທີ VII
## ການແກ້ໄຂຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 40. ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ທາງແພ່ງທີ່ເກີດຂຶ້ນໃນ **ຂສພບ** ແມ່ນດຳເນີນດ້ວຍການແກ້ໄຂພາຍໃນ ຫຼື ແກ້ໄຂພາຍນອກ.

### ມາດຕາ 41. ການແກ້ໄຂພາຍໃນ

ການແກ້ໄຂພາຍໃນ ແມ່ນດຳເນີນຜ່ານການເຈລະຈາປະນີປະນອມ ລະຫວ່າງ ຄູ່ກໍລະນີດ້ວຍກັນ, ຖ້າຍັງບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ຄະນະບໍລິຫານ **ຂສພບ** ໄກ່ເກ່ຍ, ຖ້າຍັງບໍ່ສຳເລັດ ຈຶ່ງດຳເນີນການແກ້ໄຂຢູ່ນອກເຂດ ຕາມລະບຽບກົດໝາຍ ສປປ ລາວ.

### ມາດຕາ 42. ການແກ້ໄຂພາຍນອກ

ການແກ້ໄຂພາຍນອກ ແມ່ນດຳເນີນດ້ວຍອົງການແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດ, ສານຂອງ ສປປ ລາວ.

### ມາດຕາ 43. ການແກ້ໄຂການກະທຳຜິດທາງອາຍາ

ການກະທຳຜິດທາງອາຍາທີ່ເກີດຂຶ້ນໃນ **ຂສພບ** ແມ່ນ ໃຫ້ດຳເນີນຕາມຂະບວນການຍຸຕິທຳ ຂອງ ສປປ ລາວ.

### ມາດຕາ 44. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການດຶງດູດການລົງທຶນ, ການຊຸກຍູ້, ການໃຫ້ຄຳປຶກສາ, ການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເຄື່ອນໄຫວວຽກງານການລົງທຶນ ແລະ ການພັດທະນາ **ຂສພບ** ໃຫ້ມີການຂະຫຍາຍຕົວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

### ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ

ມາດຕະການຕໍ່ຜູ້ລະເມີດໃຫ້ປະຕິບັດຕາມ ມາດຕາ 97 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 46. ຕາປະທັບ**

**ຂສພບ** ມີຕາປະທັບ 2 ໜ່ວຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຕາມພາລະບົດບາດ ຂອງຕົນ ດ້ວຍຮູບແບບທີ່ເໝາະສົມ.

46.1 ຕາປະທັບຂອງຄະນະບໍລິຫານເຂດ (ຫົວໜ້າ) 1 ໜ່ວຍ

46.2 ຕາປະທັບຂອງສະພາບໍລິຫານເສດຖະກິດ (ປະທານ) 1 ໜ່ວຍ

**ມາດຕາ 47. ການຈັດຕັ້ງປະຕິບັດ**

ສຳນັກງານນາຍົກລັດຖະມົນຕີ, ກະຊວງ-ອົງການທຽບເທົ່າ, ອົງການປົກຄອງແຂວງຫຼວງນ້ຳທາ, **ຂສພບ,** ບໍລິສັດຟອກຣິງ ອຸດສາຫະກຳ ຈຳກັດ ແລະ ປະຊາຊົນໃນເຂດອ້ອມຂ້າງ **ຂສພບ** ຈົ່ງຮັບຮູ້ ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 48. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ ເລກທີ 090 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 4/02/ 2010

# ດຳລັດ

## ວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງເຂດເສດຖະກິດພິເສດ ສາມຫຼ່ຽມຄຳ, ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ, ສປປ ລາວ

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 26 ພຶດສະພາ 2003;
- ອີງຕາມ ລັດຖະດຳລັດຂອງປະທານປະເທດ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 75/ສປປ, ລົງວັນທີ 20 ກໍລະກົດ 2009;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການ ກະຊວງແຜນການ ແລະການລົງທຶນ ສະບັບເລກທີ 0120/ຜທ.ລທ4, ລົງວັນທີ 19 ມັງກອນ 2010.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ນະໂຍບາຍ ເພື່ອສົ່ງເສີມການລົງທຶນໃນເຂດພິເສດສາມຫຼ່ຽມຄຳໃຫ້ເປັນຕົວເມືອງໃໝ່ທີ່ທັນສະໄໝ ແລະ ຍືນຍົງ, ເຮັດໃຫ້ຈຸດປະສົງຄາດໝາຍທີ່ກຳນົດໄວ້ໃນສັນຍາລະຫວ່າງລັດຖະບານກັບ ຜູ້ພັດທະນາ ປະກົດຜົນເປັນຈິງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ອາຍຸຂອງເຂດເສດຖະກິດພິເສດ ສາມຫຼ່ຽມຄຳ**

2.1 ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ຊຶ່ງຕໍ່ໄປນີ້ເອີ້ນຫຍໍ້ວ່າ "**ຂສພຄ**", ມີທີ່ຕັ້ງຢູ່ ເມືອງຕົ້ນ

ເຜີ້ງ, ແຂວງບໍ່ແກ້ວ, ຊຶ່ງລັດຖະບານຈັດສັນໃຫ້ໃນເນື້ອທີ່ດິນຈຳນວນສາມພັນ (3,000) ເຮັກຕາ ໂດຍຜູ້ພັດທະນາຈະພັດທະນາຕາມຄວາມສາມາດຕົວຈິງໃນແຕ່ລະປີ, ໃນນັ້ນກວມເອົາເນື້ອທີ່ ແປດຮ້ອຍຊາວເຈັດ (827) ເຮັກຕາ ທີ່ລັດຖະບານໄດ້ອະນຸມັດໃຫ້ແລ້ວຕາມໃບອະນຸຍາດລົງທຶນສະບັບເລກທີ 045-07/ຄຜທ, ລົງວັນທີ 26/04/2007. ສ່ວນທີ່ຍັງເຫຼືອໃຫ້ **ຂສພຄ** ຂະຫຍາຍອອກໄປໃນເຂດອ້ອມຂ້າງ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

2.2 ລັດຖະບານ ສປປ ລາວ ກຳນົດພື້ນທີ່ເຂດປ່າສະຫງວນແຫ່ງຊາດສາຍພູກິ່ວລົມຈຳນວນເຈັດພັນ (7,000) ເຮັກຕາ ໃຫ້ **ຂສພຄ** ເປັນຜູ້ປົວລະບັດຮັກສາ ແລະ ນຳໃຊ້ເປັນເຂດທ່ອງທ່ຽວປ່າໄມ້ທຳມະຊາດ ໂດຍໃຫ້ປະຕິບັດຕາມກົດໝາຍວ່າດ້ວຍປ່າສະຫງວນຢ່າງເຂັ້ມງວດ ແລະ ບໍ່ອະນຸຍາດ ໃຫ້ມີການພັດທະນາກິດຈະການອື່ນອີກ.

2.3 ເຂດເສດຖະກິດພິເສດສາມຫຼ່ຽມຄຳ ມີອາຍຸ 99 ປີ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009 ໂດຍເລີ່ມແຕ່ມື້ໄດ້ລົງນາມໃນສັນຍາລະຫວ່າງ ລັດຖະບານ ກັບ ບໍລິສັດ ສະບັບວັນທີ 26 ເມສາ 2007 ເປັນຕົ້ນໄປ.

**ມາດຕາ 3 ທີ່ຕັ້ງ ພາລະບົດບາດ**

**ຂສພຄ** ເປັນເຂດພັດທະນາໜຶ່ງ, ຊຶ່ງເຄື່ອນໄຫວຢ່າງເປັນເອກະລາດທາງດ້ານເສດຖະກິດ ຕາມຈຸດປະສົງທີ່ກຳນົດໄວ້ໃນມາດຕາ 1 ຂອງດຳລັດສະບັບນີ້, ໂດຍຂຶ້ນກັບການຊີ້ນຳ-ນຳພາໂດຍກົງຂອງລັດຖະບານ ແລະ ການຄຸ້ມຄອງຂອງອົງການປົກຄອງແຂວງບໍ່ແກ້ວ, ມີພາລະບົດບາດເຄື່ອນໄຫວດ້ານທຸລະກິດ, ບໍລິການ, ການລົງທຶນ ແລະ ການບໍລິຫານຕາມສັນຍາ ແລະ ລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບ ຂສພຄ**

ລັດ ມີນະໂຍບາຍສົ່ງເສີມທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນ **ຂສພຄ** ດ້ວຍການມອບສິດໃຫ້ **ຂສພຄ** ພິຈາລະນາຕົກລົງກ່ຽວກັບການລົງທຶນ, ການດຳເນີນທຸລະກິດ, ລາຍຮັບ-ລາຍຈ່າຍ ແລະ ອື່ນໆ ຕາມດຳລັດສະບັບນີ້ ແລະ ສັນຍາລະຫວ່າງ ລັດຖະບານ ກັບ ບໍລິສັດດອກງີ້ວຄຳ.

**ມາດຕາ 5 ຫຼັກການເຄື່ອນໄຫວພື້ນຖານຂອງ ຂສພຄ**

**ຂສພຄ** ເຄື່ອນໄຫວຕາມລະບຽບຫຼັກການທີ່ກຳນົດໄວ້ໃນ ໝວດທີ 5 ພາກທີ III ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009, ຊຶ່ງມີຫຼັກການຕົ້ນຕໍ ດັ່ງນີ້:

1. **ຂສພຄ** ສ້າງຕັ້ງຂຶ້ນໃນຂອບເຂດດິນແດນຂອງ ສປປ ລາວ, ລັດຖະບານແຫ່ງ ສປປ ລາວ ເປັນ

ຜູ້ຊີ້ນຳ ແລະ ຄຸ້ມຄອງໂດຍກົງຕໍ່ການເຄື່ອນໄຫວຂອງ **ຂສພຄ** ບົນພື້ນຖານລະບຽບ, ກົດໝາຍ ແລະ ລັດຖະທຳມະນູນຂອງ ສປປ ລາວ;

2. ເປັນເຈົ້າຕົນເອງທາງດ້ານເສດຖະກິດ ການເງິນ, ລາຍຮັບ-ລາຍຈ່າຍບໍລິຫານ;
3. ຮັບປະກັນຄວາມສະເໝີພາບ ລະຫວ່າງການລົງທຶນພາຍໃນ ກັບ ຕ່າງປະເທດ ພາຍໃນຂອບເຂດ **ຂສພຄ**;
4. ພັດທະນາເຂດຕາມກົນໄກທັນເປັນຕົວເມືອງໃໝ່ທີ່ທັນສະໄໝ, ສ້າງຊຸມຊົນໃໝ່ສີວິໄລ ແລະ ຮັບປະກັນສິ່ງແວດລ້ອມໃຫ້ຍືນຍົງ;
5. ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສາມັກຄີປອງດອງ ແລະ ເສີມສ້າງວັດທະນະທຳອັນດີງາມຂອງຊາດລາວ;
6. ປະຕິບັດສັນຍາສຳປະທານ ລະຫວ່າງ ລັດຖະບານ ກັບ ບໍລິສັດຜູ້ພັດທະນາ ຕາມດຳລັດສະບັບນີ້, ລະບຽບກົດໝາຍ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີຢ່າງເຂັ້ມງວດ.

### ມາດຕາ 6 ສິດ ແລະ ພັນທະຂອງຜູ້ທີ່ຢູ່ອາໃສໃນ ຂສພຄ

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທີ່ດຳລົງຊີວິດຢູ່ໃນ **ຂສພຄ** ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ ແລະ ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ຄະນະບໍລິຫານ **ຂສພຄ**, ເຂົ້າຮ່ວມ, ໃຫ້ຄວາມຮ່ວມມື, ເຄົາລົບ ແລະ ປະຕິບັດຕາມດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ **ຂສພຄ**. ຜູ້ອາໃສໃນ **ຂສພຄ** ໄດ້ຮັບນະໂຍບາຍສົ່ງເສີມຕ່າງໆ ຄືກັນກັບຜູ້ລົງທຶນຢູ່ໃນເຂດ.

### ມາດຕາ 7 ການພົວພັນສາກົນ

ລັດສົ່ງເສີມໃຫ້ **ຂສພຄ** ດຶງດູດຜູ້ລົງທຶນຕ່າງປະເທດ ຕາມກົດໝາຍສົ່ງເສີມການລົງທຶນ ສປປ ລາວ ເພື່ອເຂົ້າມາລົງທຶນໃນເຂດຂອງຕົນ, ທັງເປີດກວ້າງຕະຫຼາດ, ແລກປ່ຽນແຮງງານ, ວັດຖຸດິບ, ເຕັກໂນໂລຊີ, ການເງິນ, ການຄ້າ, ການສົ່ງສິນຄ້າ, ການເຂົ້າອອກ-ເມືອງ, ພົວພັນກັບບໍລິສັດຕ່າງປະເທດ ເພື່ອເຊື່ອມໂຍງເຂົ້າໃນພາກພື້ນ ແລະ ສາກົນ ບົນພື້ນຖານລະບຽບກົດໝາຍ ຂອງ ສປປ ລາວ.

## ໝວດທີ II
## ນະໂຍບາຍສົ່ງເສີມ

### ມາດຕາ 8 ຂສພຄ ໄດ້ຮັບນະໂຍບາຍສົ່ງເສີມດັ່ງນີ້:

8.1 ເຂດເສດຖະກິດພິເສດຢູ່ ສປປ ລາວ, ນັບທັງເຂດ **ຂພສຄ** ເປັນຫົວໜ່ວຍບໍລິຫານນ້ອຍ ແຕ່ສັງຄົມກວ້າງ, ມີສິດເຄື່ອນໄຫວຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 5 ຂອງກົດໝາຍວ່າດ້ວຍ

ການສົ່ງເສີມການລົງທຶນ ສະບັບ ປີ 2009;

8.2 ລັດຖະບານມອບສິດຮອບດ້ານໃຫ້ ຄະນະບໍລິຫານ **ຂສພຄ** ໃນການພັດທະນາ ແລະ ຄຸ້ມຄອງເຂດ;

8.3 ປະຕິບັດນະໂຍບາຍການບໍລິການປະຕູດຽວໃນການດຶງດູດ ແລະ ອະນຸມັດການລົງທຶນດ້ວຍຕົນເອງ;

8.4 ເປັນຜູ້ກຳນົດຄ່າເຊົ່າທີ່ດິນ, ອະສັງຫາລິມະຊັບ ແລະ ອື່ນໆ ໃນເຂດດ້ວຍຕົນເອງ;

8.5 ໄດ້ຮັບການພິຈາລະນາຍ້ອງຍໍສັນລະເສີນຈາກລັດຖະບານ.

**ມາດຕາ 9 ຜູ້ລົງທຶນທີ່ມາລົງທຶນໃນ ຂສພຄ ຈະໄດ້ຮັບນະໂຍບາຍຕ່າງໆ ດັ່ງນີ້:**

9.1 ໄດ້ຮັບນະໂຍບາຍພິເສດດ້ານອັດຕາພາສີ-ອາກອນໂດຍອີງຕາມຂະແໜງການ, ກິດຈະການ ຂະໜາດຂອງການລົງທຶນ ເປັນຕົ້ນ:

ກ). ປະຕິບັດອັດຕາອາກອນຕົວເລກທຸລະກິດ ຫຼື ອາກອນມູນຄ່າເພີ່ມ ໃນອັດຕາສູງສຸດບໍ່ເກີນ 10%;

ຂ). ອາກອນຊົມໃຊ້ ໃນອັດຕາສູງສຸດບໍ່ເກີນ 70%;

ຄ). ອາກອນກຳໄລ ໃນອັດຕາສູງສຸດບໍ່ເກີນ 20%;

ງ). ອາກອນເງິນເດືອນ ໃນອັດຕາສູງສຸດບໍ່ເກີນ 7%;

ຈ). ປະຕິບັດອັດຕາອາກອນເງິນເດືອນຂອງພະນັກງານ, ຊ່ຽວຊານ ແລະ ກຳມະກອນທີ່ເຮັດວຽກຢູ່ພາຍໃນ **ຂພສຄ** ໃຫ້ລັດ ຕາມລະບຽບກົດໝາຍ;

ສ) ໄດ້ຮັບການຍົກເວັ້ນພາສີ-ອາກອນ ການນຳເຂົ້າ ກົນຈັກ, ວັດຖຸດິບ, ອຸປະກອນ ແລະ ພາຫະນະຮັບໃຊ້ເຂົ້າໃນການຜະລິດໂດຍກົງ ຂອງວິສາຫະກິດທີ່ລົງທຶນຢູ່ພາຍໃນ **ຂສພຄ**;

9.2 ໄດ້ຮັບນະໂຍບາຍສົ່ງເສີມດ້ວຍສິດໃຊ້ທີ່ດິນ ແລະ ກຳມະສິດກ່ຽວກັບອະສັງຫາລິມະຊັບອື່ນ ຕາມ ມາດຕາ 58 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

9.3 ຜູ້ລົງທຶນ ແລະ ຄອບຄົວ ໄດ້ຮັບສິດໃນການອາໃສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 67 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

9.4 ໄດ້ຮັບສິດໃນການວ່າຈ້າງແຮງງານ ຕາມ ມາດຕາ 66 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009;

9.5 ໄດ້ຮັບການອຳນວຍຄວາມສະດວກໃນການສະໜອງຂໍ້ມູນຂ່າວສານກ່ຽວກັບການລົງທຶນ

ແລະ ອື່ນໆ;

9.6 ໄດ້ຮັບການຍ້ອງຍໍສັນລະເສີນຈາກລັດຖະບານ ຕາມຜົນງານຂອງຜູ້ລົງທຶນ.

**ມາດຕາ 10 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນໃນ ຂສພດ**

10.1 ລັດຖະບານ ຮັບຮູ້, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນໃນ **ຂສພດ** ຕໍ່ກັບການລົງທຶນ ແລະ ຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 60, 61 ແລະ 62 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009.

10.2 ລັດຖະບານຮັບຮູ້, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ພັດທະນາຕາມສັນຍາ ແລະ ຕາມດຳລັດສະບັບນີ້.

**ໝວດທີ III**

**ການພັດທະນາ, ການລົງທຶນ ແລະ ການເຄື່ອນໄຫວພາຍໃນ ຂສພດ**

**ມາດຕາ 11 ການສ້າງແຜນແມ່ບົດຂອງ ຂສພດ.**

ຄະນະບໍລິຫານ **ຂສພດ** ແລະ ສະພາບໍລິຫານເສດຖະກິດເປັນຜູ້ຄົ້ນຄວ້າ ແລະ ສ້າງແຜນແມ່ບົດພັດທະນາ **ຂສພດ** ເປັນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ, ຊຶ່ງປະກອບດ້ວຍແຜນພັດທະນາ ແລະ ນຳໃຊ້ທີ່ດິນ, ພື້ນຖານໂຄງລ່າງ, ການຂະຫຍາຍຕົວເມືອງ, ສ້າງເຂດຊຸມຊົນໃໝ່, ເຂດທ່ອງທ່ຽວ, ເຂດວັດທະນະທຳ, ການສຶກສາ, ສາທາລະນະສຸກ, ກະສິກຳ, ອຸດສາຫະກຳ, ແຜນຜະລິດ ສິນຄ້າສົ່ງອອກ, ແຜນງົບປະມານປະຈຳປີ ແລະ ອື່ນໆ.

**ມາດຕາ 12 ການພັດທະນາພື້ນຖານໂຄງລ່າງ**

12.1 ຜູ້ພັດທະນາ **ຂສພດ** ຕ້ອງດຳເນີນການກໍ່ສ້າງພື້ນຖານໂຄງລ່າງທັງໝົດ ເພື່ອອຳນວຍຄວາມສະດວກ ໃຫ້ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນເຂດ, ເຂດເຊື່ອມຕໍ່ລະຫວ່າງ **ຂສພດ** ແລະ ທ້ອງຖິ່ນ, ເຂດປ່າສະຫງວນແຫ່ງຊາດຕາມແຜນແມ່ບົດການພັດທະນາ **ຂສພດ** ທີ່ລັດຖະບານ ໄດ້ຮັບຮອງເອົາ;

12.2 ພື້ນຖານໂຄງລ່າງທີ່ຈຳເປັນ ປະກອບມີ ທາງຫຼວງ, ທາງຊອຍ, ທາງເຊື່ອມຕໍ່ຂອງເຂດ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເສຍ, ກຳຈັດຂີ້ເຫຍື້ອ, ຕາຝັ່ງກັນເຈື່ອນ, ທ່າເຮືອ, ດ່ານເຂົ້າ-ອອກ ເມືອງ, ຕາໜ່າງພາຍໃນເຂດ, ພື້ນຖານໂຄງລ່າງດ້ານການສຶກສາ, ສາທາລະນະສຸກ, ວັດທະນະທຳ-ສັງຄົມ ແລະ ອື່ນໆ, ຊຶ່ງມີມາດຕະຖານລະດັບສູງ ( ຫຼີກເວັ້ນການກໍ່ສ້າງຫຼຸດມາດຕະຖານ ທີ່ລັດຖະບານກຳນົດ );

12.3 ແຫຼ່ງທຶນພັດທະນາພື້ນຖານໂຄງລ່າງ ໄດ້ມາຈາກ ຜູ້ພັດທະນາ ແລະ ລາຍຮັບໃໝ່ທີ່ເກີດຂຶ້ນຢູ່ ພາຍໃນເຂດ ຕາມສັດສ່ວນການແບ່ງປັນງົບປະມານ ທີ່ໄດ້ກຳນົດໄວ້ ໃນມາດຕາ 24 ຂອງດຳລັດສະບັບນີ້;

12.4 ມູນຄ່າການລົງທຶນທີ່ນຳໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງທັງໝົດ ໄດ້ກຳນົດລະອຽດໃນສັນຍາ ລະຫວ່າງ ລັດຖະບານ ກັບ ຜູ້ພັດທະນາ, ແຕ່ໃນໄລຍະຕົ້ນບໍ່ຫຼຸດ 500 ລ້ານໂດລາສະຫະລັດ.

**ມາດຕາ 13 ປະເພດກິດຈະການການລົງທຶນໃນ ຂສພຄ**

1. ອຸດສາຫະກຳເພື່ອສົ່ງອອກ;
2. ສູນການຄ້າ, ສາງ, ຮ້ານຄ້າ, ເຂດປອດພາສີ;
3. ການກໍ່ສ້າງຕົວເມືອງໃໝ່, ບ້ານພັດທະນາ ແລະ ບ້ານຈັດສັນ;
4. ທະນາຄານ;
5. ກະສິກຳສະອາດ, ອຸດສາຫະກຳສະອາດ, ເຕັກໂນໂລຊີ, ການຄົ້ນຄວ້າທົດລອງ;
6. ສະໜາມກ໊ອຟ;
7. ແຫຼ່ງທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ;
8. ໂຮງຮຽນ, ໂຮງໝໍ, ຫໍວັດທະນະທຳ, ວັດ, ສວນສາທາລະນະ;
9. ກາຊີໂນ (ໂດຍມີດຳລັດຄຸ້ມຄອງຕ່າງຫາກສະເພາະ);
10. ກິດຈະການປະເພດອື່ນໆ ທີ່ລັດຖະບານອະນຸມັດໃຫ້ລົງທຶນ.

**ມາດຕາ 14 ປະເພດກິດຈະການທີ່ໄດ້ຮັບການສົ່ງເສີມ**

ຂະແໜງທຸລະກິດທີ່ໄດ້ຮັບການສົ່ງເສີມໃນ **ຂສພຄ** ປະກອບດ້ວຍກິດຈະການຕ່າງໆເປັນຕົ້ນ: ອຸດສາຫະກຳເອເລັກໂຕຣນິກ, ອຸປະກອນກໍ່ສ້າງທັນສະໄໝ, ໂຄງລ່າງແຫຼ່ງທ່ອງທ່ຽວ, ການຜະລິດ-ປຸງແຕ່ງກະສິກຳສະອາດ, ຜະລິດຕະພັນປອດສານພິດ, ຂະແໜງການຜະລິດເພື່ອສົ່ງອອກ, ການປູກຕົ້ນໄມ້ໃຫ້ເປັນປ່າ, ໂຮງຮຽນ, ໂຮງໝໍ, ວັດ, ສວນສາທາລະນະ.

ປະເພດກິດຈະການດັ່ງກ່າວ ຄະນະບໍລິຫານ **ຂສພຄ** ເປັນຜູ້ພິຈາລະນາກ່ຽວກັບການຍົກເວັ້ນ ຫຼືຫຼຸດຜ່ອນພາສີ-ອາກອນ, ຄ່າເຊົ່າທີ່ດິນ ແລະ ຄ່າບໍລິການອື່ນໆທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃນການດຳເນີນການພັດທະນາກິດຈະການດັ່ງກ່າວໃຫ້ເປັນຈິງ.

**ມາດຕາ 15 ສິດ ແລະ ພັນທະຂອງຜູ້ລົງທຶນໃນ ຂສພຄ**

ຜູ້ລົງທຶນ ໃນ **ຂສພຄ** ຕ້ອງປະຕິບັດຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 63 ຫາ 70 ຂອງກົດໝາຍ

ວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009, ຕາມດຳລັດສະບັບນີ້ ແລະ ຕາມລະບຽບການຂອງ **ຂສພຄ**.

## ມາດຕາ 16 ສິດ ແລະ ພັນທະ ຂອງຜູ້ພັດທະນາ ຂສພຄ

ຜູ້ພັດທະນາ ແມ່ນຜູ້ລົງທຶນລາຍໃຫຍ່ ເຂົ້າໃນການພັດທະນາພື້ນຖານໂຄງລ່າງ, ຊຶ່ງໃນດຳລັດສະບັບນີ້ ແມ່ນກຸ່ມບໍລິສັດ ດອກງີ້ວຄຳ (Hongkong) ຈຳກັດ, ສິດ ແລະ ພັນທະຕົ້ນຕໍມີດັ່ງນີ້:

16.1. ປະຕິບັດຕາມ ມາດຕາ 63 ຫາ 70 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009, ດຳລັດສະບັບນີ້ ແລະ ລະບຽບການຂອງ **ຂສພຄ**;

16.2 ສັນຍາລະຫວ່າງ ລັດຖະບານ ກັບ ຜູ້ພັດທະນາ;

16.3. ເກັບກູ້ທຶນຄືນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23.3 ຂອງດຳລັດສະບັບນີ້.

## ມາດຕາ 17 ການສະເໜີການລົງທຶນໃນ ຂສພຄ

ຜູ້ມີຈຸດປະສົງລົງທຶນຢູ່ **ຂສພຄ** ຕ້ອງໄດ້ປະກອບຄຳຮ້ອງການລົງທຶນ ຕາມແບບພິມທີ່ກຳນົດອອກໂດຍ ສະພາບໍລິຫານເສດຖະກິດ **ຂສພຄ**.

ຜູ້ລົງທຶນສາມາດຍື່ນແບບພິມຄຳຮ້ອງການລົງທຶນໂດຍຜ່ານແຟັກ, ຈົດໝາຍອີເລັກໂຕຣນິກ ຫຼື ຍື່ນໂດຍກົງຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂອງສະພາບໍລິຫານເສດຖະກິດ **ຂສພຄ**.

## ມາດຕາ 18 ການບໍລິການການລົງທຶນປະຕູດຽວ

ການບໍລິການການລົງທຶນປະຕູດຽວ ໃຫ້ປະຕິບັດຕາມ ມາດຕາ 44, 45 ແລະ 46 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009.

ສະພາບໍລິຫານ **ຂສພຄ** ສ້າງຕັ້ງຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ການອອກໃບທະບຽນວິສາຫະກິດ, ການສະໜອງຂໍ້ມູນຂ່າວສານ, ການບໍລິການການລົງທຶນ ແລະ ການບໍລິການດ້ານອື່ນໆ.

## ມາດຕາ 19 ການນຳເຂົ້າ-ສົ່ງອອກ

ທຸກການນຳເຂົ້າສິນຄ້າ, ອຸປະກອນ, ພາຫະນະ, ກົນຈັກ, ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ (ຍົກເວັ້ນນ້ຳມັນເຊື້ອໄຟ) ເພື່ອມານຳໃຊ້ພາຍໃນ **ຂສພຄ** ຈະໄດ້ຮັບນະໂຍບາຍດ້ານພາສີ-ອາກອນ ຕາມຂໍ້ກຳນົດສະເພາະ ຂອງ **ຂສພຄ**.

ການນຳເຂົ້າສິນຄ້າຮັບໃຊ້ພາຍໃນເຂດທັງໝົດ ໃຫ້ປະຕິບັດຕາມລະບຽບການສະເພາະຂອງເຂດ, ສ່ວນການນຳເອົາສິນຄ້າດັ່ງກ່າວ ອອກຈາກ **ຂສພຄ** ເພື່ອສົ່ງອອກ ໄປຍັງພາຍໃນປະເທດ ຕ້ອງປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ.

ສະພາບໍລິຫານເສດຖະກິດ **ຂສພຄ** ເປັນຜູ້ຍັ້ງຢືນ ແລະ ລາຍງານການນຳເຂົ້າ-ສົ່ງອອກຕໍ່ ຄະນະບໍລິຫານເຂດ ແລະ ລັດຖະບານ ເປັນປົກກະຕິສາມເດືອນ, ຫົກ ເດືອນ ແລະ ໜຶ່ງປີ.

### ມາດຕາ 20 ການເຂົ້າ-ອອກ ຂສພຄ

ການເຂົ້າ-ອອກ **ຂສພຄ** ຕ້ອງໄດ້ຜ່ານການກວດກາຂອງດ່ານ ຕາມຈຸດທີ່ລັດຖະບານກຳນົດໄວ້.

### ມາດຕາ 21 ການປົກປັກຮັກສາສິ່ງແວດລ້ອມ

ຄະນະບໍລິຫານ **ຂສພຄ** ເປັນຜູ້ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາສະພາບແວດລ້ອມ ແລະ ຊັບພະຍາກອນທຳມະຊາດໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ຮັບປະກັນການພັດທະນາແບບຍືນຍົງ.

### ມາດຕາ 22 ການພົວພັນກັບພາຍນອກ

22.1 ລັດຖະບານອະນຸຍາດໃຫ້ **ຂສພຄ** ເຄື່ອນໄຫວພົວພັນກັບບໍລິສັດ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດຕາມການຕົກລົງຂອງຄະນະບໍລິຫານ **ຂພສຄ**;

22.2 ຂະແໜງການຕ່າງໆຂອງສູນກາງ ແລະ ແຂວງບໍ່ແກ້ວ ມີໜ້າທີ່ ອຳນວຍຄວາມສະດວກ, ໃຫ້ການຊ່ວຍເຫຼືອ, ຮ່ວມມື ແລະ ຄຳແນະນຳ ເພື່ອໃຫ້ **ຂສພຄ** ເຄື່ອນໄຫວສະດວກຕາມນະໂຍບາຍ ແລະ ລະບຽບການພົວພັນຮ່ວມມືກັບຕ່າງປະເທດຂອງລັດຖະບານ ສປປ ລາວ.

## ໝວດທີ IV
## ການເງິນ ແລະ ງົບປະມານຂອງ ຂສພຄ

### ມາດຕາ 23 ການເງິນຂອງ ຂສພຄ

1. **ຂສພຄ** ເປັນຫົວໜ່ວຍແຜນການ ແລະ ການເງິນ ພິເສດ, ເພິ່ງຕົນເອງ ແລະ ກູ້ມຕົນເອງ ປະຕິບັດພັນທະຕໍ່ ລັດຖະບານ ຕາມສັນຍາ ແລະ ດຳລັດສະບັບນີ້;
2. ການຊຳລະສະສາງພາຍໃນເຂດ ໃຫ້ນຳໃຊ້ສະກຸນເງິນກີບ, ການຊຳລະສະສາງກັບຕ່າງປະເທດ ໃຫ້ປະຕິບັດຕາມສັນຍາກັບຄູ່ຮ່ວມມື ແຕ່ໃຫ້ທຽບຄ່າເປັນເງິນກີບ;
3. ທະນາຄານ ສປປ ລາວ ເປັນຜູ້ກວດກາຄຸ້ມຄອງການຈໍລະຈອນເງິນຕາໃນເຂດ ຕາມລະບຽບກົດໝາຍວ່າດ້ວຍທະນາຄານ ສປປ ລາວ.

### ມາດຕາ 24 ງົບປະມານ ຂສພຄ

**ຂສພຄ** ມີລະບົບງົບປະມານເປັນຂອງຕົນເອງ ໂດຍແມ່ນກອງປະຊຸມຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ ເປັນຜູ້ພິຈາລະນາຕົກລົງ.

24.1 ລາຍຮັບຂອງ **ຂສພຄ** ໄດ້ມາຈາກ:

1. ການໃຫ້ສິດໃຊ້ ຫຼື ການໃຫ້ເຊົ່າທີ່ດິນ ທີ່ໄດ້ພັດທະນາແລ້ວ ຕາມຂອບເຂດທີ່ດິນຂອງລັດທີ່ເຂົ້າເປັນຮຸ້ນ ລວມທັງທີ່ດິນທີ່ໄດ້ຈາກພາກສ່ວນອື່ນ ຊຶ່ງຮັບການຊົດເຊີຍແລ້ວ;
2. ການຂາຍ ຫຼື ໃຫ້ເຊົ່າອະສັງຫາລິມະຊັບອື່ນໆ;
3. ຄ່າບໍລິການ ແລະ ຄ່າທຳນຽມການລົງທຶນ, ສະແຕັມອາກອນດ້ານຕ່າງໆ ແລະ ການບໍລິການດ້ານວິຊາການ ອື່ນໆ ຕາມທີ່ລັດຖະບານກຳນົດໄວ້;
4. ລາຍຮັບພາສີ-ອາກອນ ທີ່ເກີດຂຶ້ນໃນເຂດ (ຍົກເວັ້ນ ພາສີ-ອາກອນ ນຳເຂົ້າ ສປປ ລາວ);
5. ເງິນປັບໃໝຈາກການຄ້ຳປະກັນການລົງທຶນໃນເຂດ;
6. ລາຍຮັບຈາກກາຊິໂນ, ໂຮງແຮມ, ຮ້ານຊັບພະສິນຄ້າ, ກິດຈະການອື່ນ;
7. ການຊື້ຂາຍ-ຮຸ້ນ ທາງກົງ ຫຼື ທາງອ້ອມ ທັງພາຍໃນ ແລະ ຕ່າງປະເທດ;
8. ລາຍຮັບອື່ນ ຕາມການຕົກລົງຂອງລັດຖະບານ.

24.2 ລາຍຈ່າຍ ຂອງ **ຂສພຄ** ປະກອບດ້ວຍ:

1. ຈ່າຍການລົງທຶນພັດທະນາພື້ນຖານໂຄງລ່າງ;
2. ຈ່າຍຄ່າຄຸ້ມຄອງ ບໍລິຫານ ຂອງ **ຂສພຄ**;
3. ຈ່າຍເງິນເດືອນ, ບຳເນັດ, ບຳນານ (ພະນັກງານລັດ ແລະ ພະນັກງານຂອງ **ຂສພຄ**);
4. ຈ່າຍສະຫວັດດີການສັງຄົມ (ພະນັກງານລັດ, ພະນັກງານຂອງ **ຂສພຄ** ແລະ ພະນັກງານຕາມສັນຍາ);
5. ຈ່າຍສາທາລະນະປະໂຫຍດທີ່ຈຳເປັນ ສຳລັບເຂດດັ່ງກ່າວ: ໄຟຟ້າ, ນ້ຳປະປາ, ສະຖານີລົດເມ, ການທຳຄວາມສະອາດຕົວເມືອງ, ສວນສາທາລະນະ, ການປູກຕົ້ນໄມ້ແຄມທາງ ແລະ ອື່ນໆ;
6. ຈ່າຍຄ່າອຸບັດຕິເຫດຕ່າງໆ;
7. ຄັງສະສົມ ຂອງ **ຂສພຄ**.

- ສຳລັບສັດສ່ວນແຕ່ລະລາຍຈ່າຍ ແມ່ນກອງປະຊຸມຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ **ຂສພຄ** ເປັນຜູ້ຕົກລົງ;
- ສຳລັບເງິນເດືອນ, ບຳເນັດ, ບຳນານ ຂອງພະນັກງານລັດ ທີ່ປະຈຳການ ຢູ່ **ຂສພບ** ນັ້ນ ຕ້ອງສູງກວ່າ ຫຼື ບໍ່ໃຫ້ຫຼຸດອັດຕາເງິນເດືອນ, ບຳເນັດ, ບຳນານ ຂອງພະນັກງານ ສັງກັດລັດ ໃນແຕ່ລະໄລຍະ ແລະ ຂຶ້ນກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ຂອງ **ຂສພຄ.**

24.3 ອັດຕາສ່ວນການແບ່ງປັນ ລາຍຮັບ-ລາຍຈ່າຍ (ງົບປະມານ) ລະຫວ່າງ ລັດຖະບານ ກັບຜູ້

ພັດທະນາ ໃຫ້ດຳເນີນການຕາມລະບຽບການຖືຮຸ້ນ, ຊຶ່ງຄິດໄລ່ຕົວຈິງໃນແຕ່ລະໄລຍະ 5 ປີ, 10 ປີ, 20 ປີ, 50 ປີ... ແລະ ໃຫ້ກຳນົດລະອຽດໃນສັນຍາເພີ່ມເຕີມ ລະຫວ່າງ ລັດຖະບານ ກັບ ກຸ່ມບໍລິສັດ ດອກງີ້ວຄຳ.

24.4 ງົບປະມານໃຊ້ຈ່າຍ ໃນການຄຸ້ມຄອງບໍລິຫານໃນໄລຍະຕົ້ນ ຂອງຄະນະບໍລິຫານ **ຂສພຄ** ໄດ້ມາຈາກຜູ້ພັດທະນາ ຊຶ່ງຈະໄດ້ກຳນົດໄວ້ໃນສັນຍາ ເພີ່ມເຕີມ ລະຫວ່າງ ລັດຖະບານ ກັບ ກຸ່ມບໍລິສັດ ດອກງີ້ວຄຳ.

### ມາດຕາ 25 ການແບ່ງປັນຜົນປະໂຫຍດ ລະຫວ່າງ ລັດ ກັບ ຜູ້ພັດທະນາ

25.1 ຜົນປະໂຫຍດຂອງລັດຖະບານ:

1. ເງິນປັນຜົນ ຕາມສັດສ່ວນການປະກອບຮຸ້ນ ແຕ່ລະໄລຍະ 5 ປີ, 10 ປີ, 20 ປີ, 50 ປີ... (ທາງກົງ) ແລະ ໃຫ້ກຳນົດລະອຽດໃນສັນຍາເພີ່ມເຕີມ ລະຫວ່າງ ລັດຖະບານ ກັບ ກຸ່ມບໍລິສັດ ດອກງີ້ວຄຳ;
2. ຄ່າຊັບພະຍາກອນທຳມະຊາດ ການນຳໃຊ້ປ່າສະຫງວນ, ລິຂະສິດອື່ນໆ ຂອງລັດຖະບານ ທີ່ **ຂພສຂ**) ນຳໃຊ້;
3. ໝາກຜົນການພັດທະນາທັງໝົດພື້ນຖານໂຄງລ່າງ, ເຂດເຊື່ອມຕໍ່, ຍອດຜະລິດຕະພັນພາຍໃນ (GDP) ຂອງທ້ອງຖິ່ນ (ທາງອ້ອມ);
4. ການຂະຫຍາຍໂອກາດວຽກເຮັດງານທຳຂອງປະຊາຊົນ;
5. ເມື່ອສິ້ນສຸດອາຍຸສັນຍາແລ້ວ ສິ່ງປຸກສ້າງ, ອຸປະກອນທັງໝົດຂອງ **ຂສພຄ** ຈະຕົກເປັນກຳມະສິດຂອງລັດຖະບານ, ຍົກເວັ້ນອາຄານເພື່ອຢູ່ອາໄສ ແລະ ກິດຈະການທີ່ເປັນຂອງສ່ວນຕົວຄົນລາວ, ຄົນຕ່າງປະເທດ ທີ່ໄດ້ສັນຊາດລາວ ຫຼື ພົນລະເມືອງລາວກົດຕິມະສັກ.

25.2 ຜົນປະໂຫຍດຂອງ ອົງການປົກຄອງແຂວງ:

1. ຄ່ານຳໃຊ້ຊັບພະຍາກອນທຳມະຊາດ ໃນ **ຂສພຄ** ( ບໍ່ໃຫ້ຫຼຸດ 5% ຂອງມູນຄ່າຊັບພະຍາກອນທຳມະຊາດ);
2. 30% ຂອງລາຍຮັບທັງໝົດທີ່ລັດຖະບານໄດ້ມາຈາກເງິນປັນຜົນ ແລະ ເງິນແບ່ງປັນງົບປະມານ **ຂສພຄ**;
3. ຄ່າບໍລິການດ້ານວິຊາການ ຕາມທີ່ລັດຖະບານກຳນົດໄວ້ໃນເວລາທີ່ອົງການປົກຄອງ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງຂອງແຂວງບໍ່ແກ້ວ ບໍລິການໃຫ້ **ຂສພຄ**.

25.3 ຜົນປະໂຫຍດ ຂອງອົງການປົກຄອງເມືອງຕົ້ນເຜີ້ງ:

1. 30% ຂອງຄ່ານຳໃຊ້ຊັບພະຍາກອນທຳມະຊາດ ໃນ **ຂສພຄ** ທີ່ອົງການປົກຄອງແຂວງໄດ້

ຮັບ;

2. 30% ຂອງລາຍຮັບທັງໝົດ ທີ່ລັດຖະບານ ໄດ້ມາຈາກເງິນປັນຜົນ ແລະ ເງິນແບ່ງປັນງົບປະມານ **ຂສພຄ** ທີ່ອົງການປົກຄອງແຂວງໄດ້ຮັບ;
3. ຄ່າບໍລິການດ້ານວິຊາການ ຕາມລະບຽບກົດໝາຍ ທີ່ອົງການປົກຄອງເມືອງຕົ້ນເຜີ້ງ ບໍລິການໃຫ້ **ຂສພຊ**).

25.4 ຜູ້ພັດທະນາ ຈະໄດ້ຮັບຜົນປະໂຫຍດດັ່ງນີ້:

1. ລາຍຮັບຈາກການປັນຜົນຂອງການປະກອບຮຸ້ນ ຕາມອັດຕາຕົວຈິງໃນ ແຕ່ລະໄລຍະ 5 ປີ, 10 ປີ, 20 ປີ, 50 ປີ... ໂດຍໃຫ້ກຳນົດລະອຽດໃນສັນຍາເພີ່ມເຕີມ ລະຫວ່າງ ລັດຖະບານ ກັບ ກຸ່ມບໍລິສັດ ດອກງີ້ວຄຳ;
2. ລາຍຮັບຈາກການຖືຮຸ້ນໃນກິດຈະການຕ່າງໆທີ່ເກີດຂຶ້ນໃໝ່ ໃນ **ຂສພຄ**;
3. ລາຍຮັບໃນການດຳເນີນທຸລະກິດ ບໍລິການ, ການລົງທຶນ ແລະ ລາຍຮັບອື່ນໆຕາມການຕົກລົງຂອງລັດຖະບານ.

ສຳລັບສິດຜົນປະໂຫຍດ ແລະ ບັນຫາອື່ນໆທີ່ຍັງບໍ່ທັນກຳນົດຊັດເຈນ ໃນດຳລັດສະບັບນີ້ ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງສັນຍາເພີ່ມເຕີມຮ່ວມກັບກຸ່ມບໍລິສັດດອກງີ້ວຄຳ ຕິດແນບໂດຍຖືເປັນເອກະສານສຳຄັນຂອງ ດຳລັດສະບັບນີ້.

## ໝວດທີ V
## ໂຄງປະກອບການຈັດຕັ້ງຂອງ ຂສພຄ

### ມາດຕາ 26 ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງ **ຂສພຄ** ປະກອບມີ:

- ຄະນະບໍລິຫານ **ຂສພຄ** (Administration Board) ເປັນອົງການປົກຄອງບໍລິຫານລັດ ໃນ **ຂສພຄ.**
- ສະພາບໍລິຫານເສດຖະກິດ **ຂສພຄ** (Economic Management Board) ເປັນອົງການຄຸ້ມຄອງເສດຖະກິດ, ທຸລະກິດ, ການບໍລິການ **ຂສພຄ.**

### ມາດຕາ 27 ຄະນະບໍລິຫານ ຂສພຄ

ຄະນະບໍລິຫານ **ຂສພຄ** ຂຶ້ນກັບການຊີ້ນຳໂດຍກົງ ແລະ ຖືກແຕ່ງຕັ້ງຈາກລັດຖະບານ, ຊຶ່ງປະກອບດ້ວຍ ຫົວໜ້າໜຶ່ງທ່ານ ແລະ ຮອງຫົວໜ້າຈຳນວນໜຶ່ງ, ມີກົງຈັກການຈັດຕັ້ງຊ່ວຍວຽກ ແລະ ບຸກຄະລາກອນຈຳນວນໜຶ່ງ ເພື່ອປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນ (ຈຳນວນກົງຈັກ ແລະ ບຸກຄະ

ລາກອນ ໃຫ້ອີງຕາມຄວາມຕ້ອງການແຕ່ລະໄລຍະ ແລະ ຄວາມສາມາດສະໜອງງົບປະມານ ຂອງເຂດ).

**ມາດຕາ 28 ສະພາບໍລິຫານເສດຖະກິດ ຂສພຄ**

ສະພາບໍລິຫານເສດຖະກິດ **ຂສພຄ** ປະກອບດ້ວຍປະທານໜຶ່ງທ່ານ ຊຶ່ງມາຈາກຝ່າຍຜູ້ພັດທະນາ, ຮອງປະທານ ສອງທ່ານ ທີ່ຖືກແຕ່ງຕັ້ງມາຈາກຝ່າຍລັດຖະບານ ແລະ ຜູ້ພັດທະນາຝ່າຍລະ ໜຶ່ງທ່ານ ແລະ ກຳມະການຫົກທ່ານ (ການແຕ່ງຕັ້ງກຳມະການ ແມ່ນອີງຕາມສັດສ່ວນການປະກອບຮຸ້ນ) ໂດຍແມ່ນກອງປະຊຸມລະຫວ່າງສະພາບໍລິຫານເສດຖະກິດ ກັບຄະນະບໍລິຫານເຂດ ເປັນຜູ້ ຮັບຮອງ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານ ຂສພຄ**

1. ຄົ້ນຄວ້າ ແລະ ວາງແຜນຍຸດທະສາດດ້ານການປົກຄອງ, ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ໂດຍສອດຄ່ອງກັບແນວທາງນະໂຍບາຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງພັກ ແລະ ລະບຽບກົດໝາຍການປົກຄອງ;

2. ຄົ້ນຄວ້າຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງພົນລະເມືອງ, ການເຂົ້າ-ອອກເມືອງ;

3. ຄົ້ນຄວ້ານະໂຍບາຍການພັດທະນາສັງຄົມ, ການສົ່ງເສີມການສຶກສາ, ສາທາລະນະສຸກ, ວັດທະນະທຳ, ການແກ້ໄຂບັນຫາທາງສັງຄົມ;

4. ຮັບປະກັນຄວາມສາມັກຄີ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳ ພາຍໃນ **ຂສພຄ** ຕາມລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ;

5. ຈັດຕັ້ງການເກັບລາຍຮັບຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 24 ຂໍ້ 3, 4 ແລະ 8 ຂອງດຳລັດສະບັບນີ້ ແລະ ລາຍຮັບຕາມສັນຍາ ລະຫວ່າງ ລັດຖະບານ ກັບ ບໍລິສັດຜູ້ພັດທະນາ;

6. ຮ່ວມກັບສະພາບໍລິຫານເສດຖະກິດ ແກ້ໄຂຂໍ້ຂັດແຍ່ງພາຍໃນ **ຂສພຄ**;

7. ຮ່ວມກັບສະພາບໍລິຫານເສດຖະກິດ ປົກປັກຮັກສາສິ່ງແວດລ້ອມ ເພື່ອຮັບປະກັນການພັດທະນາແບບຍືນຍົງ;

8. ແນະນຳສະພາບໍລິຫານເສດຖະກິດ ໃນການປະຕິບັດສິດ ແລະ ໜ້າທີ່ຂອງສະພາດັ່ງກ່າວ;

9. ປະສານສົມທົບກັບອົງການປົກຄອງຂັ້ນເມືອງ, ຂໍຄຳເຫັນຊີ້ນຳຈາກອົງການປົກຄອງແຂວງບໍ່ແກ້ວ ແລະ ຂະແໜງສາຍຕັ້ງຂອງສູນກາງ;

10. ພົວພັນ ແລະ ຮ່ວມມືສາກົນຕາມສິດ ແລະ ໜ້າທີ່ຂອງຕົນ;

11. ສະຫຼຸບລາຍງານຜົນການເຄື່ອນໄຫວ ແລະ ສະເໜີຂໍຄຳເຫັນຊີ້ນຳຈາກອົງການປົກຄອງແຂວງ ແລະ ຂະແໜງການສາຍຕັ້ງຂອງສູນກາງ;

12. ມີສິດ ແລະ ໜ້າທີ່ອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງສະພາບໍລິຫານເສດຖະກິດ ຂສພດ**

1. ຄົ້ນຄວ້າ ແລະ ວາງແຜນພັດທະນາເສດຖະກິດ, ແຜນງານ ແລະ ໂຄງການການລົງທຶນ ໃນແຕ່ລະໄລຍະ 6 ເດືອນ, 1 ປີ, 5 ປີ 20 ປີ;

2. ຄົ້ນຄວ້າ ລະບຽບການ ໃນການຄຸ້ມຄອງ ແລະ ບໍລິຫານເສດຖະກິດ;

3. ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຂອງ ສປປ ລາວ ສະບັບປີ 2009;

4. ຂຸດຄົ້ນລາຍຮັບ, ສ້າງ ແລະ ປະຕິບັດງົບປະມານ **ຂສພດ**;

5. ຈັດຕັ້ງການເກັບລາຍຮັບຕ່າງໆຕາມທີ່ໄດ້ກຳນົດໄວ້ ໃນ ມາດຕາ 24 ຂໍ້ 1,2,5, 6 ແລະ 7 ຂອງດຳລັດສະບັບນີ້;

6. ສະໜອງຂໍ້ມູນຂ່າວສານ ພິຈາລະນາການລົງທຶນ ແລະ ປະເມີນຜົນການລົງທຶນ;

7. ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ຫົວໜ່ວຍທຸລະກິດ;

8. ເປັນເຈົ້າການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຮ່ວມກັບຄະນະບໍລິຫານ **ຂສພດ**;

9. ມອບພັນທະໃຫ້ລັດຖະບານຕາມສັນຍາ ແລະ ດຳລັດສະບັບນີ້;

10. ສ້າງ, ນຳໃຊ້ ແລະ ຄຸ້ມຄອງພະນັກງານ, ກຳມະກອນ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

11. ພັດທະນາການສຶກສາ, ສາທາລະນະສຸກ, ວັດທະນະທຳ-ສັງຄົມ;

12. ປົກປັກຮັກສາຄວາມສາມັກຄີພາຍໃນ ແລະ ພາຍນອກ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;

13. ປົກປັກຮັກສາສະພາບແວດລ້ອມ ເພື່ອຮັບປະກັນການພັດທະນາແບບຍືນຍົງ;

14. ຄຸ້ມຄອງຈັດສັນ ແລະ ນຳໃຊ້ທີ່ດິນ, ການປຸກສ້າງປະເພດຕ່າງໆ ໃຫ້ກົມກຽວ;

15. ລາຍງານ ຜົນຂອງການເຄື່ອນໄຫວປະຈຳໄຕມາດ, 6 ເດືອນ ແລະ ປະຈຳປີ ໃຫ້ແກ່ລັດຖະບານ ແລະ ຄະນະບໍລິຫານ **ຂສພດ**;

16. ພົວພັນກັບ ບໍລິສັດ, ຫົວໜ່ວຍທຸລະກິດພາຍໃນ ແລະ ຕ່າງປະເທດຕາມລະບຽບກົດໝາຍ;

17. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 31 ການປະສານງານ ແລະ ເຮັດວຽກຂອງຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ**

1. ຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ ເຄື່ອນໄຫວຕາມ ສິດ ແລະ ໜ້າທີ່ ຂອງຕົນຕາມທີ່ກຳນົດໄວ້ໃນມາດຕາ 29 ແລະ 30 ຂອງດຳລັດສະບັບນີ້, ມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການປະຕິບັດສັນຍາ ແລະ ດຳລັດສະບັບນີ້, ເປັນຜູ້ຮັບຜິດຊອບຕໍ່ລັດຖະບານ ແລະ ຄະນະພັກ-ອົງການປົກຄອງແຂວງບໍ່ແກ້ວ;

2. ກົນໄກການປະສານງານລະຫວ່າງຄະນະບໍລິຫານ **ຂສພຄ** ກັບ ສະພາບໍລິຫານເສດຖະກິດ **ຂສພຄ** ແມ່ນກອງປະຊຸມຮ່ວມ, ການພົບປະ, ການພິຈາລະນາຂໍ້ສະເໜີ ຂອງກັນ ແລະ ກັນ;

3. ກອງປະຊຸມຮ່ວມສະໄໝສາມັນ ລະຫວ່າງ ຫົວໜ້າຄະນະບໍລິຫານກັບປະທານສະພາບໍລິຫານເສດຖະກິດຈັດຂຶ້ນ ເດືອນລະໜຶ່ງຄັ້ງ ແລະ ສາມາດຈັດຕັ້ງກອງປະຊຸມວິສາມັນໄດ້ ຕາມການສະເໜີຂອງຄະນະໃດໜຶ່ງ ແລະ ກອງປະຊຸມດັ່ງກ່າວເປັນບ່ອນພິຈາລະນາຕັດສິນບັນຫາສຳຄັນຕ່າງໆຂອງ **ຂສພຄ** (ແຜນພັດທະນາເຂດ, ງົບປະມານ, ການແຕ່ງຕັ້ງບຸກຄະລາກອນ, ການພົວພັນຮ່ວມມືກັບຕ່າງປະເທດ, ຂໍ້ຂັດແຍ່ງພາຍໃນ ເຂດ ແລະ ອື່ນໆ), ກອງປະຊຸມຮ່ວມພາຍໃຕ້ການເປັນປະທານຂອງຫົວໜ້າຄະນະບໍລິຫານເຂດ;

4. ທັງສອງອົງການມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ເຄົາລົບສິດ ແລະ ໜ້າທີ່ເຊິ່ງກັນ ແລະ ກັນ;

5. ກໍລະນີ ສອງຄະນະບໍ່ສາມາດຕົກລົງກັນໃນບັນຫາໃດໜຶ່ງ ໃຫ້ນຳສະເໜີ ແລະ ປະຕິບັດຕາມການຕົກລົງຂອງລັດຖະບານ.

## ໝວດທີ VI
## ການຄຸ້ມຄອງຂອງອົງການມະຫາພາກຕໍ່ ຂສພຄ

### ມາດຕາ 32 ອົງການທີ່ມີສິດໜ້າທີ່ຄຸ້ມຄອງ ຂສພຄ.

1. ຄະນະພັກ **ຂສພຄ** ຂຶ້ນກັບການຊີ້ນຳນຳພາຂອງຄະນະປະຈຳພັກ ແຂວງບໍ່ແກ້ວ.

2. ຄະນະບໍລິຫານເຂດ ແລະ ສະພາບໍລິຫານເສດຖະກິດ ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຮອບດ້ານຂອງລັດຖະບານ ແລະ ຂອງເຈົ້າແຂວງບໍ່ແກ້ວ.

3. ບັນດາກະຊວງ-ອົງການທຽບເທົ່າ ສາຍຕັ້ງມີຄວາມຮັບຜິດຊອບໃນວຽກງານ ແລະ ຄຸ້ມຄອງເຂດ ຕາມພາລະບົດບາດໜ້າທີ່ຂອງອົງການຕົນ.

### ມາດຕາ 33 ສິດ ແລະ ໜ້າທີ່ຂອງລັດຖະບານ:

1. ເປັນຜູ້ອຳນວຍຄວບຄຸມຄວາມໝັ້ນຄົງ, ຄວາມປອດໄພ ແລະ ຊີ້ນຳໂດຍກົງ ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບພາຍໃນ **ຂສພຄ**;

2. ອອກນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວພັນກັບການພັດທະນາ ແລະ ຄຸ້ມຄອງ **ຂສພຄ**;

3. ແນະນຳ ແລະ ຂົນຂວາຍນັກລົງທຶນລາຍໃຫຍ່ ເພື່ອມາລົງທຶນໃນ **ຂສພຄ**;

4. ຕົກລົງໂຄງປະກອບການຈັດຕັ້ງ ແລະ ແຕ່ງຕັ້ງບຸກຄະລາກອນຂອງ **ຂສພຄ** ແລະ ໜ້າທີ່ອື່ນໆ ຕາມລະບຽບກົດໝາຍກຳນົດ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງກະຊວງ ແລະ ອົງການທຽບເທົ່າທີ່ກ່ຽວຂ້ອງ**

1. ບັນດາກະຊວງ ແລະ ອົງການທຽບເທົ່າ ເປັນຜູ້ສະໜອງບັນດານະໂຍບາຍການສົ່ງເສີມ ແລະ ຄຸ້ມຄອງການດຳເນີນກິດຈະການລົງທຶນ ໃນ **ຂສພຄ** ທີ່ຕິດພັນກັບຂະແໜງການຕົນ;

2. ຕິດຕາມການຈັດຕັ້ງປະຕິບັດລະບຽບ ແລະ ກົດໝາຍ ໃນ **ຂສພຄ** ທີ່ຂະແໜງການຕົນໄດ້ກຳນົດອອກ;

3. ປະກອບບຸກຄະລາກອນຊ່ວຍຝຶກອົບຮົມຕຳແໜ່ງງານກ່ຽວຂ້ອງຕາມການສະເໜີຂອງ **ຂສພຄ**.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງອົງການປົກຄອງແຂວງບໍ່ແກ້ວ**

1. ຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມການເຄື່ອນໄຫວຂອງເຂດ;

2. ຕິດຕາມການປະຕິບັດສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຂອງລັດ, ຂອງຜູ້ລົງທຶນ;

3. ເປັນຜູ້ອຳນວຍຄວາມສະດວກດ້ານຕ່າງໆໃຫ້ແກ່ການລົງທຶນ ລວມທັງຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນເຂດທ້ອງຖິ່ນຂອງຕົນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 36 ສິດ ແລະ ໜ້າທີ່ຂອງເມືອງຕົ້ນເຜິ້ງ**

1. ປະສານສົມທົບກັບຄະນະບໍລິຫານເຂດ ແລະ ສະພາບໍລິຫານເສດຖະກິດ ໃນການສ້າງແຜນພັດທະນາເຂດ ແລະ ເຂດອ້ອມຂ້າງໃຫ້ກົມກຽວ;

2. ອຳນວຍຄວາມສະດວກໃນການຈັດສັນທີ່ດິນ, ການຍົກຍ້າຍ ແລະ ການດຳລົງຊີວິດຂອງປະຊາຊົນບໍລິເວນອ້ອມຂ້າງເຂດຕາມແຜນຜັງທີ່ຮັບຮອງ;

3. ຈັດສັນ ແລະ ອົບຮົມວິຊາອາຊີບ, ປະກອບວຽກເຮັດງານທຳໃຫ້ປະຊາຊົນ ຕາມຄວາມຕ້ອງການພາຍໃນເຂດ;

4. ຄະນະພັກ-ອົງການປົກຄອງເມືອງຕົ້ນເຜິ້ງ, ຄະນະພັກ-ຄະນະບໍລິຫານ **ຂສພຄ** ມີສິດ ແລະ ໜ້າທີ່ເທົ່າທຽມກັນ, ເຄົາລົບນັບຖືຊຶ່ງກັນ ແລະ ກັນ, ຮັບຜິດຊອບຜົນໄດ້ຜົນເສຍຕໍ່ແຂວງ ແລະ ລັດຖະບານໃນການຈັດຕັ້ງປະຕິບັດສັນຍາ ແລະ ດຳລັດສະບັບນີ້.

**ມາດຕາ 37 ສິດ ແລະ ໜ້າທີ່ຂອງບ້ານອ້ອມຂ້າງເຂດ**

1. ປ້ອງກັນຄວາມສະຫງົບ, ຄວາມປອດໄພ ພາຍໃນເຂດ;

2. ສະໜັບສະໜູນການພັດທະນາ, ການລົງທຶນໃນເຂດ ຕາມດຳລັດ ແລະ ກົດໝາຍ;

3. ຊົມໃຊ້ ແລະ ປົກປັກຮັກສາພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກຕ່າງໆ ທີ່ພັດທະນາຂຶ້ນພາຍໃນເຂດ **ຂສພຄ** ບົນພື້ນຖານລະບຽບຂອງເຂດ;

4. ສຶກສາອົບຮົມການຈັດຕັ້ງ ແລະ ປະຊາຊົນ ໃນຄວາມຮັບຜິດຊອບຂອງຕົນ ເພື່ອປະກອບອາຊີບ, ຂະຫຍາຍທຸລະກິດຂະໜາດນ້ອຍ ແລະ ກາງ ປີ່ນອ້ອມກິດຈະການຕ່າງໆຂອງເຂດ.

5. ປະຕິບັດສິດ ແລະ ໜ້າທີ່ຕ່າງໆ ຕາມທີ່ອົງການປົກຄອງເມືອງມອບໝາຍ.

## ມາດຕາ 38 ການຮັກສາຄວາມສະຫງົບໃນ ຂສພຄ

1. **ຂສພຄ** ມີຫ້ອງການ ປກຊ-ປກສ ອັນດຽວ ເຮັດໜ້າທີ່ຮັກສາຄວາມສະຫງົບຂອງ **ຂສພຄ**. ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງ ແຂວງບໍ່ແກ້ວ ແລະ ຂຶ້ນກັບການຊີ້ນຳນຳພາໂດຍກົງຂອງຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາສະຫງົບແຂວງບໍ່ແກ້ວ, ໂດຍແມ່ນຫົວໜ້າຄະນະບໍລິຫານເຂດ ເປັນປະທານ ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບເຂດ;

2. ສິດ ແລະ ໜ້າທີ່ຂອງຫ້ອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງ **ຂສພຄ** ມອບໃຫ້ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງບໍ່ແກ້ວ ເປັນຜູ້ກຳນົດ;

3. ພົນລະເມືອງ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດໃນເຂດ ມີພັນທະທີ່ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງເຂດ ແລະ ກົດໝາຍຂອງ ສປປ ລາວ ກຳນົດໄວ້.

## ມາດຕາ 39 ການນຳໃຊ້ ພາສາ ພາຍໃນ ຂສພຄ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳລົງຊີວິດ ຫຼື ດຳເນີນທຸລະກິດ ຢູ່ພາຍໃນ **ຂສພຄ** ໃຫ້ຖືເອົາພາສາລາວເປັນພາສາທາງລັດຖະການ, ພາສາຈີນ ແລະ ພາສາອັງກິດ ເປັນພາສາສາກົນ.

ສຳລັບການນຳໃຊ້ພາສາ ເພື່ອປະຊາສຳພັນ, ການຂຽນປ້າຍໂຄສະນາ, ປ້າຍຊື່ບໍລິສັດ, ປ້າຍອື່ນໆພາຍໃນ **ຂສພຄ** ແມ່ນໃຫ້ຂຽນເປັນພາສາລາວຂຶ້ນເທິງສຸດ ແລະ ພາສາສາກົນອື່ນໆຕາມທີຫຼັງ.

# ໝວດທີ VII

# ການແກ້ໄຂຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 40 ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ທາງແພ່ງທີ່ເກີດຂຶ້ນໃນ **ຂສພຄ** ແມ່ນດຳເນີນດ້ວຍການແກ້ໄຂພາຍໃນ ຫຼື ແກ້ໄຂພາຍນອກ.

## ມາດຕາ 41 ການແກ້ໄຂພາຍໃນ

ການແກ້ໄຂພາຍໃນ ແມ່ນດຳເນີນຜ່ານການເຈລະຈາປະນີປະນອມ ລະຫວ່າງ ຄູ່ກໍລະນີດ້ວຍກັນ, ຖ້າຍັງບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ຄະນະບໍລິຫານ **ຂສພຄ** ໄກ່ເກ່ຍ, ຖ້າຍັງບໍ່ສຳເລັດ ຈຶ່ງດຳເນີນການແກ້ໄຂຢູ່ນອກເຂດ ຕາມລະບຽບກົດໝາຍ ສປປ ລາວ.

**ມາດຕາ 42 ການແກ້ໄຂພາຍນອກ**

ການແກ້ໄຂພາຍນອກ ແມ່ນດຳເນີນດ້ວຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສານຂອງ ສປປ ລາວ.

**ມາດຕາ 43 ການແກ້ໄຂການກະທຳຜິດທາງອາຍາ**

ການກະທຳຜິດທາງອາຍາທີ່ເກີດຂຶ້ນໃນ **ຂສພດ** ແມ່ນໃຫ້ດຳເນີນຕາມຂະບວນການຍຸຕິທຳຂອງ ສປປ ລາວ.

**ມາດຕາ 44 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການດຶງດູດການລົງທຶນ, ການຊຸກຍູ້, ການໃຫ້ຄຳປຶກສາ, ການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເຄື່ອນໄຫວວຽກງານການລົງທຶນ ແລະ ການພັດທະນາ **ຂສພດ** ໃຫ້ມີການຂະຫຍາຍຕົວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 45 ມາດຕະການຕໍ່ຜູ້ລະເມີດ**

ມາດຕະການຕໍ່ຜູ້ລະເມີດ ໃຫ້ປະຕິບັດຕາມ ມາດຕາ 97 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 46 ຕາປະທັບ**

**ຂສພດ** ມີຕາປະທັບ 2 ໜ່ວຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນ ດ້ວຍຮູບແບບທີ່ເໝາະສົມ.

46.1 ຕາປະທັບຂອງຄະນະບໍລິຫານເຂດ (ຫົວໜ້າ) 1 ໜ່ວຍ;

46.2 ຕາປະທັບຂອງສະພາບໍລິຫານເສດຖະກິດ(ປະທານ) 1 ໜ່ວຍ.

**ມາດຕາ 47 ການຈັດຕັ້ງປະຕິບັດ**

ສຳນັກງານນາຍົກລັດຖະມົນຕີ, ກະຊວງ-ອົງການທຽບເທົ່າ, ອົງການປົກຄອງແຂວງບໍ່ແກ້ວ, **ຂສພດ**, ບໍລິສັດ ດອກງິ້ວຄຳ ຈຳກັດ ແລະ ປະຊາຊົນໃນເຂດອ້ອມຂ້າງ **ຂສພດ** ຈົ່ງຮັບຮູ້ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 48 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 05 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 05. 01. 2018

# ດຳລັດ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3145/ກຜທ. ລທ4, ລົງວັນທີ 21 ທັນວາ 2017.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກ ການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນໃສ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີຊື່ຫຍໍ້ເປັນພາສາລາວວ່າ “ຄລທ” ມີຢູ່ສອງ ຂັ້ນ ຄື: ຂັ້ນສູນກາງ ແລະ ຂັ້ນແຂວງ.

**ກ. ຂັ້ນສູນກາງ:**

ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ໂດຍມີຊື່ຫຍໍ້ວ່າ **ຄລທ.ສ** ແມ່ນການຈັດຕັ້ງທີ່ບໍ່ປະຈໍາການ, ມີພາລະບົດບາດເປັນເສນາທິການຄົ້ນຄວ້າ, ພິຈາລະນາ ແລະ ອະນຸຍາດການລົງທຶນ ຕາມການຕົກລົງຂອງລັດຖະບານ.

**ຂ. ຂັ້ນແຂວງ:**

ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ໂດຍມີຊື່ຫຍໍ້ວ່າ **ຄລທ.ຂ** ແມ່ນການຈັດຕັ້ງທີ່ບໍ່ປະຈໍາການ, ມີພາລະບົດບາດເປັນເສນາທິການຄົ້ນຄວ້າ, ພິຈາລະນາ ແລະ ອະນຸຍາດການລົງທຶນ ຕາມການຕົກລົງຂອງອົງການປົກຄອງແຂວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີໜ້າທີ່ ດັ່ງນີ້:

**ກ. ຂັ້ນສູນກາງ:**

1. ຊ່ວຍລັດຖະບານໃນການຊີ້ນໍາ ການຄົ້ນຄວ້າ ຮ່າງນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກໍາກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນເອກະຊົນ ເພື່ອສະເໜີຕໍ່ ລັດຖະບານ ພິຈາລະນາ;

2. ຊີ້ນໍາການຫັນເອົາ ນະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ ມາເປັນ ແຜນງານ, ແຜນການ ແລະ ໂຄງການລະອຽດກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາກເອກະຊົນ ຢູ່ ສປປ ລາວ;

3. ຊີ້ນໍາ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ, ນິຕິກໍາ ແລະ ສັນຍາ ທີ່ພົວພັນກັບການລົງທຶນ;

4. ຄົ້ນຄວ້າ, ພິຈາລະນາ ແລະ ນໍາສະເໜີລັດຖະບານ ເພື່ອປັບປຸງ, ແກ້ໄຂນະໂຍບາຍ ແລະ ນິຕິກໍາກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

5. ປຶກສາຫາລື, ຕົກລົງຮັບຮອງເອົາດ້ານຫຼັກການ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາກເອກະຊົນ ຢູ່ ສປປ ລາວເພື່ອສະເໜີ ລັດຖະບານ ພິຈາລະນາ ຕາມລະບຽບການ;

6. ຊີ້ນໍາ ແລະ ກວດກາ ໃນການປັບປຸງ ແລະ ແກ້ໄຂ ຂັ້ນຂອດການອະນຸຍາດໃຫ້ມີຄວາມກະທັດຮັດ

ວ່ອງໄວ, ໂປ່ງໃສ ແລະ ອໍານວຍຄວາມສະດວກໃນການດໍາເນີນທຸລະກິດ ຂອງພາກເອກະຊົນ ຢູ່ ສປປ ລາວ ໃຫ້ມີປະສິດທິພາບ ແນໃສ່ຫຼຸດຜ່ອນລະດັບຄວາມຫຍຸ້ງຍາກ ກໍຄືຍົກລະດັບຕົວຊີ້ວັດຄວາມສະດວກໃນການດໍາເນີນທຸລະກິດ ຢູ່ ສປປ ລາວ;

7. ຊີ້ນໍາການຈັດຕັ້ງປະຕິບັດວຽກງານບໍລິການ ການລົງທຶນປະຕູດຽວ ໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

8. ນຳສະເໜີລັດຖະບານ ພິຈາລະນາຕົກລົງບັນດາບັນຫາ ຫຼື ໂຄງການທີ່ກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ບໍ່ສາມາດຕັດສິນໄດ້;

9. ໃຫ້ທິດຊີ້ນຳຕໍ່ບັນຫາຂໍ້ຂັດແຍ່ງ ແລະ ຂໍ້ສະເໜີຂອງພາກທຸລະກິດ ກ່ຽວກັບການປັບປຸງສະພາບແວດລ້ອມຂອງການລົງທຶນ;

10. ຈັດກອງປະຊຸມຮ່ວມລະຫວ່າງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ ປະຈຳປີ ເພື່ອສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານລັດຖະບານ;

11. ປະຕິບັດໜ້າທີ່ ສົ່ງເສີມ, ຄຸ້ມຄອງການລົງທຶນຂອງພາກເອກະຊົນ ຢູ່ ສປປ ລາວ ຕາມກົດໝາຍ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

**ຂ. ຂັ້ນແຂວງ:**

1. ຊ່ວຍອົງການບໍລິຫານລັດຂັ້ນແຂວງໃນການຊີ້ນຳ ການຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາກເອກະຊົນ ຢູ່ຂັ້ນແຂວງ ເພື່ອສະເໜີຕໍ່ອົງການບໍລິຫານລັດຂັ້ນແຂວງ ແລະ ສະພາປະຊາຊົນແຂວງ, ນະຄອນຫຼວງ ເພື່ອພິຈາລະນາ;

2. ຊີ້ນຳການຫັນເອົານະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ, ສະພາປະຊາຊົນແຂວງ ແລະ ອົງການບໍລິຫານລັດຂັ້ນແຂວງ ມາເປັນ ແຜນງານ, ແຜນການ ແລະ ໂຄງການລະອຽດກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນພາກເອກະຊົນຢູ່ພາຍໃນແຂວງ, ນະຄອນຫຼວງ;

3. ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ກົດໝາຍ, ນິຕິກຳ ແລະ ສັນຍາ ທີ່ພົວພັນກັບການລົງທຶນຕາມຂັ້ນຂອງຕົນ;

4. ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີ ອົງການບໍລິຫານລັດຂັ້ນແຂວງ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ເພື່ອປັບປຸງ, ແກ້ໄຂນະໂຍບາຍ ແລະ ນິຕິກຳກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

5. ປຶກສາຫາລື, ຕົກລົງຮັບຮອງເອົາດ້ານຫຼັກການ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາກເອກະຊົນ ຢູ່ຂັ້ນແຂວງ ເພື່ອສະເໜີ ອົງການບໍລິຫານລັດຂັ້ນແຂວງ, ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາຕາມລະບຽບການ;

6. ຊີ້ນຳ ແລະ ກວດກາ ໃນການປັບປຸງ ແລະ ແກ້ໄຂຂອດຂັ້ນ ການອອກອະນຸຍາດ ໃຫ້ມີຄວາມກະທັດຫັດ, ວ່ອງໄວ, ໂປ່ງໃສ, ອຳນວຍຄວາມສະດວກໃນການດຳເນີນທຸລະກິດຂອງພາກເອກະຊົນ ຢູ່ພາຍໃນແຂວງຂອງຕົນໃຫ້ມີປະສິດທິພາບ ແນໃສ່ຫຼຸດຜ່ອນລະດັບຄວາມຫຍຸ້ງຍາກ ກໍຄືຍົກລະດັບຕົວຊີ້ວັດຄວາມງ່າຍດາຍໃນການດຳເນີນທຸລະກິດ ຢູ່ ສປປ ລາວ;

7. ຊີ້ນຳການຈັດຕັ້ງປະຕິບັດວຽກງານບໍລິການ ການລົງທຶນປະຕູດຽວຂັ້ນແຂວງ ໃນການສົ່ງເສີມ ແລະ ດຶງດູດການລົງທຶນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

8. ນຳສະເໜີ ອົງການບໍລິຫານລັດຂັ້ນແຂວງ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

ຂັ້ນສູນກາງ ພິຈາລະນາຕົກລົງບັນດາບັນຫາ ຫຼື ໂຄງການທີ່ກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ບໍ່ສາມາດຕັດສິນໄດ້;

9. ໃຫ້ທິດຊີ້ນຳຕໍ່ບັນຫາຂໍ້ຂັດແຍ່ງ ແລະ ຂໍ້ສະເໜີຂອງພາກທຸລະກິດ ຢູ່ຂັ້ນແຂວງ ກ່ຽວກັບການປັບປຸງສະພາບແວດລ້ອມຂອງການລົງທຶນ;

10. ສະຫຼຸບ ແລະ ລາຍງານວຽກງານຂອງຕົນ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເດືອນລະເທື່ອ;

11. ປະຕິບັດໜ້າທີ່ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນຢູ່ຂັ້ນແຂວງ ຕາມກົດໝາຍ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງອົງການບໍລິຫານລັດຂັ້ນແຂວງ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ.

**ມາດຕາ 4 ຂອບເຂດສິດ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີສິດ ດັ່ງນີ້:

**ກ. ຂັ້ນສູນກາງ:**

1. ພິຈາລະນາອະນຸຍາດການລົງທຶນ ໃນກິດຈະການຄວບຄຸມ ທີ່ມີຜົນກະທົບຮ້າຍແຮງ, ກິດຈະການສຳປະທານ, ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ແລະ ການລົງທຶນພັດທະນາເຂດເສດຖະກິດພິເສດ ຕາມພາລະບົດບາດ;

2. ພິຈາລະນາການຕໍ່ອາຍຸສັນຍາ, ໂອນຮຸ້ນໂຄງການ, ດັດແກ້ສັນຍາ, ປ່ຽນແປງຜູ້ລົງທຶນ, ເພີ່ມ ຫຼື ຫຼຸດ ກິດຈະການລົງທຶນ, ຂະຫຍາຍເນື້ອທີ່ສຳປະທານ ແລະ ອື່ນໆ ໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ແລະ ການລົງທຶນພັດທະນາເຂດເສດຖະກິດພິເສດ ຕາມພາລະບົດບາດ;

3. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ການຍົກເລີກ ການລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ແລະ ການລົງທຶນພັດທະນາເຂເສດຖະກິດພິເສດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47, 86 ແລະ 88 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;

4. ຈັດກອງປະຊຸມພົບປະກັບຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສະເໜີນະໂຍບາຍສົ່ງເສີມການລົງທຶນ ກໍຄືແກ້ຂໍ້ຂ້ອງໃຈ ແລະ ບັນຫາສະເໜີຂອງຜູ້ລົງທຶນ;

5. ຊີ້ນຳການເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ຂັ້ນແຂວງ:**

1. ພິຈາລະນາອະນຸຍາດການລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມພາລະບົດບາດຂອງຕົນ;

2. ພິຈາລະນາຕໍ່ອາຍຸສັນຍາ, ໂອນຮຸ້ນໂຄງການ, ດັດແກ້ສັນຍາ, ປ່ຽນແປງຜູ້ລົງທຶນ, ເພີ່ມ ຫຼື ຫຼຸດ ກິດຈະການລົງທຶນ, ຂະຫຍາຍເນື້ອທີ່ສຳປະທານ ແລະ ອື່ນໆ ໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຕາມຂອບເຂດສິດອະນຸມັດຂອງຂັ້ນແຂວງ;

3. ພິຈາລະນາ ການປ່ຽນແປງ, ການໂຈະ ຫຼື ການຍົກເລີກ ການລົງທຶນໃນກິດຈະການຄວບຄຸມ ແລະ ສຳປະທານ ຕາມຂັ້ນຂອງຕົນ ຕາມທີ່ກຳນົດໄວ້ໃນມາດຕາ 47, 86 ແລະ 88 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;

4. ຊີ້ນຳການເຄື່ອນໄຫວ ຂອງຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາຍໃນແຂວງ, ນະຄອນຫຼວງ;

5. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບການຈັດຕັ້ງ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ມີສອງຂັ້ນ ຄື: ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ (ຄລທ.ສ) ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ (ຄລທ.ຂ).

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ມີຫ້ອງການບໍລິການ ການລົງທຶນປະຕູດຽວ ໂດຍຖືເອົາກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ເປັນຫ້ອງການປະຈຳການ, ທັງເປັນກົງຈັກຊ່ວຍວຽກ ແລະ ປະກອບມີຜູ້ຕາງໜ້າຈາກຂະແໜງການກ່ຽວຂ້ອງເຂົ້າຮ່ວມເປັນຄະນະ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ມີຫ້ອງການບໍລິການ ການລົງທຶນປະຕູດຽວ ໂດຍຖືເອົາຂະແໜງສົ່ງເສີມການລົງທຶນ, ພະແນກແຜນການ ແລະ ການລົງທຶນ ແຂວງ ເປັນຫ້ອງການປະຈຳການ, ທັງເປັນກົງຈັກຊ່ວຍວຽກ ແລະ ປະກອບມີຜູ້ຕາງໜ້າຈາກຂະແໜງການກ່ຽວຂ້ອງເຂົ້າຮ່ວມເປັນຄະນະ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ປະກອບມີບຸກຄະລາກອນ ດັ່ງນີ້:

**ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ປະກອບດ້ວຍ:**

1. ຮອງນາຍົກລັດຖະມົນຕີ ເປັນປະທານ;

2. ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ ທັງເປັນຜູ້ປະຈຳການ;

3. ລັດຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ ເປັນຮອງປະທານ;

4. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;

5. ຮອງລັດຖະມົນຕີ ກະຊວງການເງິນ ເປັນຄະນະ;

6. ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;

7. ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

8. ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;

9. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

10. ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

11. ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;

12. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;

**ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງປະກອບດ້ວຍ:**

1. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນປະທານ;

2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນຮອງປະທານ;

3. ຫົວໜ້າພະແນກ ແຜນການ ແລະ ການລົງທຶນ ເປັນຄະນະ, ທັງເປັນຜູ້ປະຈຳການ;

4. ຫົວໜ້າພະແນກ ອຸດສະຫະກຳ ແລະ ການຄ້າ ເປັນຮອງປະທານ;

5. ຫົວໜ້າພະແນກ ການເງິນ ເປັນຄະນະ;

6. ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;

7. ຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

8. ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ເປັນຄະນະ;

9. ຫົວໜ້າພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

10. ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

11. ຫົວໜ້າພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;

12. ຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ເປັນຄະນະ;

ສຳລັບບຸກຄະລາກອນທີ່ຈະປະກອບເຂົ້າໃນ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແຕ່ລະຂັ້ນແມ່ນໃຫ້ແຕ່ລະອົງການກ່ຽວຂ້ອງເປັນຜູ້ແຕ່ງຕັ້ງ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7  ຫຼັກການ

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງສະມາຊິກໃນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

3. ທຸກການເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ພະນັກງານ-ລັດຖະກອນ, ກົງຈັກຊ່ວຍວຽກຄະນະ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ຫຼື ອົງການບໍລິຫານລັດຂັ້ນແຂວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;

4. ສົມທົບແໜ້ນກັບການເພີ່ມທະວີການຄຸ້ມຄອງຂອງລັດ ຢ່າງລວມສູນ ເປັນເອກະພາບໃນທົ່ວປະເທດ;

5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;

6. ຮັບປະກັນ ການບໍລິການ ການລົງທຶນປະຕູດຽວ ໃຫ້ສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ, ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍ.

### ມາດຕາ 8  ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະມີເປົ້າໝາຍໃນແຕ່ລະໄລຍະ;

2. ເຄື່ອນໄຫວວຽກງານໂດຍຖືເອົາ ລະບອບປະຊຸມເປັນປະຈຳສາມັນ ເດືອນລະ 2 ຄັ້ງ ຫຼື ກໍລະນີມີຄວາມຈຳເປັນ ສາມາດເປີດກອງປະຊຸມວິສາມັນຕາມການຕົກລົງຊີ້ນຳຂອງປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາ, ຊຸກຍູ້, ກວດກາ, ຕິດຕາມ-ຄຸ້ມຄອງ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້-ຜົນເສຍ, ພ້ອມທັງລາຍງານ ໃຫ້ລັດຖະບານ ຫຼື ອົງການບໍລິຫານລັດຂັ້ນແຂວງ ຢ່າງປົກກະຕິ;

3. ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ ຢູ່ ສປປ ລາວ ໃຫ້ດີຂຶ້ນ;

4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

### ມາດຕາ 9 ລະບຽບການດຳເນີນກອງປະຊຸມ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ທີ່ໄດ້ຮັບແຕ່ງຕັ້ງ ແລະ ບັນດາພາກສ່ວນກ່ຽວ

ຂ້ອງກັບບັນຫາທີ່ນຳເຂົ້າພິຈາລະນາໃນກອງປະຊຸມ ຕ້ອງເຂົ້າຮ່ວມກອງປະຊຸມຕາມການເຊື້ອເຊີນ. ໃນກໍລະນີຈຳເປັນ ບໍ່ສາມາດເຂົ້າຮ່ວມໄດ້ ແມ່ນໃຫ້ມອບໝາຍຜູ້ຕາງໜ້າເຂົ້າຮ່ວມແທນ. ຜູ້ເຂົ້າຮ່ວມກອງປະຊຸມມີສິດປະກອບຄຳເຫັນ ຕໍ່ທຸກບັນຫາທີ່ນຳເຂົ້າພິຈາລະນາໃນກອງປະຊຸມ ຕິດພັນກັບວຽກງານຂະແໜງການຂອງຕົນ ຫຼື ຂະແໜງການທີ່ກ່ຽວຂ້ອງ.

ກອງປະຊຸມ ພິຈາລະນາຕົກລົງອະນຸມັດໂຄງການລົງທຶນ, ມີບົດບັນທຶກກອງປະຊຸມຢ່າງລະອຽດ, ຜົນການປຶກສາຫາລື ຕ້ອງເປັນມະຕິຕົກລົງຂອງກອງປະຊຸມ ໂດຍມີລາຍເຊັນຂອງປະທານກອງປະຊຸມ.

ກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີຄະນະກຳມະການຫຼາຍກວ່າເຄິ່ງໜຶ່ງຂຶ້ນໄປ ເຂົ້າຮ່ວມ ແລະ ມີການເຂົ້າຮ່ວມຂອງອົງການທີ່ພົວພັນໂດຍກົງກັບບັນຫາທີ່ນຳມາຄົ້ນຄວ້າ ແລະ ພິຈາລະນາ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 10 ງົບປະມານ ແລະ ຕາປະທັບ

ງົບປະມານຮັບໃຊ້ສຳລັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແມ່ນໃຫ້ນຳໃຊ້ງົບປະມານບໍລິຫານປົກກະຕິ ຂອງກະຊວງແຜນການ ແລະ ການລົງທຶນ, ສ່ວນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ແມ່ນໃຫ້ນຳໃຊ້ງົບປະມານບໍລິຫານປົກກະຕິ ຂອງພະແນກແຜນການ ແລະ ການລົງທຶນ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ ມີຕາປະທັບສະເພາະ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການຂອງຕົນ.

### ມາດຕາ 11 ການຜັນຂະຫຍາຍ

ມອບໃຫ້ ປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການປະຕູດຽວ ຂັ້ນສູນກາງ.

ມອບໃຫ້ ປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານ ການບໍລິການປະຕູດຽວ ຂັ້ນແຂວງ.

### ມາດຕາ 12 ການຈັດຕັ້ງປະຕິບັດ

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 13 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ຕົກລົງ ແລະ ລະບຽບຕ່າງໆກ່ອນໜ້ານີ້ ທີ່ຂັດກັບດຳລັດສະບັບນີ້ ລ້ອນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 188/ລບ

ນະຄອນຫຼວງວຽງຈັນ. ວັນທີ 07. 06. 2018

# ດຳລັດ
# ວ່າດ້ວຍ ເຂດເສດຖະກິດພິເສດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ການສະເໜີ ສະບັບເລກທີ 0950/ກຜທ, ລົງວັນທີ 30 ພຶດສະພາ 2018 ຂອງກະຊວງແຜນການ ແລະ ການລົງທຶນ.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວເຂດເສດຖະກິດພິເສດ ຊຶ່ງເປັນການ ຈັດຕັ້ງຜັນຂະຫຍາຍກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ເພື່ອດຶງດູດການລົງທຶນ ດ້ວຍການວາງນະໂຍບາຍສົ່ງເສີມພິເສດ ແນໃສ່ເຮັດໃຫ້ການລົງທຶນມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ, ໂປ່ງໃສ, ຮັບປະກັນສິດຜົນປະໂຫຍດຂອງລັດ, ປະຊາຊົນ, ຜູ້ພັດທະນາເຂດ ແລະ ຜູ້ລົງທຶນ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ.

### ມາດຕາ 2 ເຂດເສດຖະກິດພິເສດ

ເຂດເສດຖະກິດພິເສດ ຂຽນຫຍໍ້ວ່າ "**ຂສພ**" ຂຽນເປັນພາສາອັງກິດ: Special Economic Zone "SEZ" ແມ່ນເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການ

ລົງທຶນ ທີ່ນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ນະວັດຕະກຳໃນການຜະລິດກະສິກຳເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ ເພື່ອການພັດທະນາແບບຍືນຍົງ, ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດ ອາດປະກອບມີ ນິຄົມອຸດສາຫະກຳ, ເຂດພັດທະນາກະສິກຳ, ອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ການພັດທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການບໍລິການ, ການຄ້າ, ການທ່ອງທ່ຽວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ອຸດສາຫະກຳການຜະລິດ** ໝາຍເຖິງ ການປຸງແຕ່ງດ້ວຍການນຳໃຊ້ເຄື່ອງຈັກ, ເຕັກໂນໂລຊີທັນສະໄໝ ແລະ ແຮງງານຄົນຢູ່ໃນໂຮງງານ ເພື່ອທຳການຜະລິດ, ການແປຮູບວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ເປັນສິນຄ້າ ລວມທັງການນຳເອົາຊິ້ນສ່ວນມາປະກອບໃຫ້ກາຍເປັນຜະລິດຕະພັນໃໝ່ ທີ່ສ້າງມູນຄ່າເພີ່ມ;

**2. ການບໍລິການ** ໝາຍເຖິງ ການພັດທະນາອຸດສາຫະກຳການທ່ອງທ່ຽວ ທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ; ການບໍລິການທາງດ້ານສາທາລະນະສຸກ, ສຶກສາ ແລະ ກິລາ-ກາຍຍະກຳ, ໂຮງແຮມ ແລະ ການບັນເທີງ, ອະສັງຫາລິມະຊັບ, ສູນການຄ້າທັນສະໄໝ, ການບໍລິການຂົນສົ່ງ, ການທະນາຄານ ແລະ ການເງິນ;

**3. ຜູ້ພັດທະນາເຂດ** ໝາຍເຖິງ ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສປປ ລາວ ໃຫ້ລົງທຶນ ພັດທະນາລະບົບພື້ນຖານໂຄງລ່າງ ຂອງເຂດເສດຖະກິດພິເສດ;

**4. ຜູ້ລົງທຶນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນ ເພື່ອດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການ ຢ່າງຖືກຕ້ອງຕາມກົດໝາຍ ຢູ່ໃນເຂດເສດຖະກິດພິເສດ;

**5. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ** ໝາຍເຖິງ ການຈັດຕັ້ງທີ່ລັດຖະບານສ້າງຕັ້ງຂຶ້ນ ໂດຍມີພາລະບົດບາດ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

**6. ຄະນະຄຸ້ມຄອງເຂດ** ໝາຍເຖິງ ຫົວໜ່ວຍການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ເພື່ອສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຊຶ່ງໄດ້ຮັບອະນຸມັດສ້າງຕັ້ງຢູ່ບັນດາແຂວງ, ນະຄອນຫຼວງ;

**7. ໜ່ວຍງານບໍລິການການລົງທຶນປະຕູດຽວ** ໝາຍເຖິງ ການຈັດຕັ້ງໜຶ່ງ ເພື່ອອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການຢູ່ພາຍໃນເຂດເສດຖະກິດພິເສດ ໃຫ້ມີຄວາມສະດວກວ່ອງໄວ, ໂປ່ງໃສ ແລະ ມີປະສິດທິຜົນ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບເຂດເສດຖະກິດພິເສດ

ລັດ ຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາເຂດເສດຖະກິດພິເສດ.

ລັດ ວາງນະໂຍບາຍພິເສດ ກ່ຽວກັບການລົງທຶນ, ການດຳເນີນທຸລະກິດ,ການຜະລິດ, ການບໍລິການ ລາຍຮັບ-ລາຍຈ່າຍ, ການຄຸ້ມຄອງບໍລິຫານດ້ວຍກົນໄກປະຕູດຽວ ໃນເຂດເສດຖະກິດພິເສດ ໂດຍສະເພາະ ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ເພື່ອດຶງດູດການລົງທຶນໃສ່ບັນດາຂະແໜງການ ທີ່ເປັນບູລິ ມະສິດຂອງລັດ ໃນແຕ່ລະໄລຍະ ແນໃສ່ຍາດແຍ່ງເຕັກໂນໂລຊີ, ບົດຮຽນໃນການຄຸ້ມຄອງທຸລະກິດ, ພັດທະນາຊັບພະຍາກອນມະນຸດ, ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານໃນການຄຸ້ມຄອງ, ແກ້ໄຂວຽກເຮັດງານທຳ ແລະ ການຫຼຸດໂຕນກັນດ້ານການພັດທະນາຂອງປະຊາຊົນບັນດາເຜົ່າ, ສ້າງແຫຼ່ງລາຍຮັບເຂົ້າງົບປະມານແຫ່ງລັດ.

### ມາດຕາ 5 ຫຼັກການການເຄື່ອນໄຫວວຽກງານຂອງເຂດເສດຖະກິດພິເສດ

ເຂດເສດຖະກິດພິເສດເຄື່ອນໄຫວວຽກງານຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ, ສັນຍາພັດທະນາ ແລະ ນະໂຍບາຍສົ່ງເສີມຕາມດຳລັດສະບັບນີ້;
2. ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນະທຳອັນດີງາມຂອງຊາດ;
3. ຄຸ້ມຄອງບໍລິຫານ ຕາມກົນໄກການບໍລິການປະຕູດຽວ;
4. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພພາຍໃນເຂດເສດຖະກິດພິເສດ ແລະ ແຂວງ, ນະຄອນຫຼວງ ບ່ອນເຂດເສດຖະກິດພິເສດຕັ້ງຢູ່.

### ມາດຕາ 6 ການປົກປ້ອງການລົງທຶນຂອງຜູ້ພັດທະນາເຂດ ແລະ ຜູ້ລົງທຶນ

ຜູ້ພັດທະນາເຂດ ແລະ ຜູ້ລົງທຶນຢູ່ເຂດເສດຖະກິດພິເສດ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ຈາກລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

### ມາດຕາ 7 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບການຄຸ້ມຄອງ ແລະ ການພັດທະນາເຂດເສດຖະກິດພິເສດ ໃນ ສປປ ລາວ.

### ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນ

ໂລຊີ, ປະສົບການ ໃນການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ, ການຕະຫຼາດ, ການຄ້າ, ແຮງງານ, ແຫຼ່ງທຶນ, ປະຕິບັດສົນທິສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການກຳນົດ ແລະ ການສ້າງຕັ້ງເຂດເສດຖະກິດພິເສດ

### ມາດຕາ 9 ການກຳນົດເຂດເສດຖະກິດພິເສດ

ອົງການປົກຄອງທ້ອງຖິ່ນ ເປັນຜູ້ກຳນົດ ແລະ ສະເໜີເຂດເສດຖະກິດພິເສດ ຂອງຕົນ ໂດຍປະສານສົມທົບກັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ.

### ມາດຕາ 10 ເງື່ອນໄຂການກຳນົດເຂດເສດຖະກິດພິເສດ

ໃນການກຳນົດເຂດເສດຖະກິດພິເສດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີວັດຖຸປະສົງ ຂອງເຂດເສດຖະກິດພິເສດ ຈະແຈ້ງ;
2. ມີທີ່ຕັ້ງທີ່ເໝາະສົມ, ກຳນົດເນື້ອທີ່ ແລະ ເຂດແດນ ຢ່າງຈະແຈ້ງ;
3. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ;
4. ສອດຄ່ອງກັບແຜນຍຸດທະສາດ ທີ່ດິນແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາ ຂສພ.

### ມາດຕາ 11 ການສ້າງຕັ້ງເຂດເສດຖະກິດພິເສດ

ລັດຖະບານ ເປັນຜູ້ພິຈາລະນາຕົກລົງ ສ້າງຕັ້ງເຂດເສດຖະກິດພິເສດ ຕາມການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ.

ພາຍຫຼັງ ລັດຖະບານ ຕົກລົງສ້າງຕັ້ງເປັນເຂດເສດຖະກິດພິເສດແລ້ວ ຈຶ່ງກຳນົດຮູບການລົງທຶນ ແລະ ຄັດເລືອກຜູ້ພັດທະນາ.

### ມາດຕາ 12 ເງື່ອນໄຂການສ້າງຕັ້ງເຂດເສດຖະກິດພິເສດ

ການສ້າງຕັ້ງເຂດເສດຖະກິດພິເສດ ນອກຈາກເງື່ອນໄຂທີ່ໄດ້ກຳນົດໄວ້ ໃນມາດຕາ 10 ຂອງດຳລັດສະບັບນີ້ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ກຳນົດອາຍຸການພັດທະນາເຂດ ທີ່ຊັດເຈນ;
2. ກຳນົດແຈ້ງຜົນປະໂຫຍດຂອງລັດ, ປະຊາຊົນ, ຜູ້ພັດທະນາເຂດ ແລະ ຜູ້ລົງທຶນ;
3. ກຳນົດນະໂຍບາຍສົ່ງເສີມທີ່ຈະແຈ້ງ;
4. ຜ່ານການປະເມີນຜົນທາງດ້ານເສດຖະກິດ-ເຕັກນິກ ແລະ ສິ່ງແວດລ້ອມ-ສັງຄົມ;
5. ຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ.

### ມາດຕາ 13 ຮູບການລົງທຶນພັດທະນາເຂດເສດຖະກິດພິເສດ

ການລົງທຶນພັດທະນາເຂດເສດຖະກິດພິເສດ ມີສາມຮູບການ ດັ່ງນີ້:

1. ລັດລົງທຶນຮ້ອຍສ່ວນຮ້ອຍ;

2. ລັດຮ່ວມທຶນກັບເອກະຊົນພາຍໃນ ຫຼື ຕ່າງປະເທດ;

3. ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ.

**ມາດຕາ 14 ເງື່ອນໄຂຂອງຜູ້ພັດທະນາເຂດ**

ຜູ້ພັດທະນາເຂດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຖານະນິຕິບຸກຄົນ;

2. ມີຖານະການເງິນທີ່ເຂັ້ມແຂງໝັ້ນຄົງ ໂດຍໄດ້ຮັບການກວດກາ ແລະ ຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ ທີ່ເຊື່ອຖືໄດ້;

3. ມີປະສົບການ ແລະ ໄດ້ຮັບຜົນສໍາເລັດ ໃນການດໍາເນີນທຸລະກິດ ໂດຍມີການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ;

4. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ ແລະ ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທໍາຜິດໂດຍເຈດຕະນາ.

**ມາດຕາ 15 ການສະເໜີຂໍພັດທະນາ**

ຜູ້ມີຈຸດປະສົງລົງທຶນພັດທະນາເຂດເສດຖະກິດພິເສດ ຕ້ອງຍື່ນຄໍາຮ້ອງພ້ອມດ້ວຍເອກະສານປະກອບຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ.

ໃນກໍລະນີມີຜູ້ສະເໜີຂໍພັດທະນາເຂດເສດຖະກິດພິເສດ ແຫ່ງດຽວແຕ່ສອງຄົນຂຶ້ນໄປ ຕ້ອງຜ່ານການຄັດເລືອກຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ຜູ້ມີຈຸດປະສົງລົງທຶນພັດທະນາເຂດເສດຖະກິດພິເສດ ຕ້ອງຜ່ານການພິຈາລະນາຕາມ ສອງ ຂັ້ນຕອນ ຄື: ຂັ້ນຕອນເຊັນບົດບັນທຶກຄວາມເຂົ້າໃຈ ແລະ ຂັ້ນຕອນເຊັນສັນຍາພັດທະນາ.

**ມາດຕາ 16 ເອກະສານປະກອບການສະເໜີເຊັນບົດບັນທຶກຄວາມເຂົ້າໃຈ**

ການສະເໜີຂໍເຊັນບົດບັນທຶກຄວາມເຂົ້າໃຈ ປະກອບດ້ວຍເອກະສານ ດັ່ງນີ້:

1. ໃບຄໍາຮ້ອງ;

2. ເອກະສານຢັ້ງຢືນຖານະນິຕິບຸກຄົນ;

3. ເອກະສານຢັ້ງຢືນຖານະການເງິນ;

4. ແຜນວາດເບື້ອງຕົ້ນ ເນື້ອທີ່ດິນຂອງໂຄງການ;

5. ເອກະສານອື່ນ ຕາມທີ່ໄດ້ກໍານົດໄວ້ໃນໃບຄໍາຮ້ອງ.

**ມາດຕາ 17 ການພິຈາລະນາການເຊັນບົດບັນທຶກຄວາມເຂົ້າໃຈ**

ພາຍຫຼັງໄດ້ຮັບຄໍາຮ້ອງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຄົ້ນຄວ້າ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເພື່ອພິຈາລະນາ.

ໃນກໍລະນີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຕົກລົງເຫັນດີແລ້ວ

ກະຊວງແຜນການ ແລະ ການລົງທຶນ ເຊັນບົດບັນທຶກຄວາມເຂົ້າໃຈ ເພື່ອດໍາເນີນການສໍາຫຼວດພື້ນທີ່, ສຶກສາຂໍ້ມູນ ແລະ ປະກອບເອກະສານ ໃຫ້ສໍາເລັດພາຍໃນກໍານົດ ສິບແປດ ເດືອນ.

**ມາດຕາ 18 ເອກະສານປະກອບການສະເໜີເຊັນສັນຍາພັດທະນາ**

ການສະເໜີຂໍເຊັນສັນຍາພັດທະນາ ປະກອບດ້ວຍເອກະສານ ດັ່ງນີ້:

1. ໃບສະເໜີຂໍພັດທະນາ.
2. ໃບຢັ້ງຢືນຂອບເຂດເນື້ອທີ່ດິນລະອຽດຂອງໂຄງການ ຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;
3. ແຜນແມ່ບົດການພັດທະນາໂຄງການ ແລະ ແຜນຜັງກໍ່ສ້າງເບື້ອງຕົ້ນ;
4. ບົດວິພາກເສດຖະກິດ-ເຕັກນິກ;
5. ໃບຢັ້ງຢືນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
6. ຮ່າງສັນຍາພັດທະນາເຂດເສດຖະກິດພິເສດ;
7. ເອກະສານອື່ນ ຕາມທີ່ໄດ້ກໍານົດໄວ້ໃນໃບສະເໜີຂໍພັດທະນາ.

**ມາດຕາ 19 ການພິຈາລະນາເຊັນສັນຍາພັດທະນາ**

ພາຍຫຼັງສໍາເລັດການສຶກສາຂໍ້ມູນ, ປະກອບເອກະສານຖືກຕ້ອງ, ຄົບຖ້ວນ ແລະ ຮັບຮອງເອົາໂດຍກອງປະຊຸມຄະນະວິຊາການຂອງຂະແໜງການ ແລະ ທ້ອງຖິ່ນແລ້ວ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ລາຍງານຜົນຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ, ເມື່ອໄດ້ຮັບການຕົກລົງເຫັນດີແລ້ວ ກະຊວງແຜນການ ແລະ ການລົງທຶນ ສະເໜີລັດຖະບານ ຂໍການອະນຸມັດເຊັນສັນຍາພັດທະນາ ກັບຜູ້ພັດທະນາເຂດ ແລະ ອອກໃບອະນຸຍາດລົງທຶນພັດທະນາຢ່າງເປັນທາງການ.

ການສະເໜີຂໍພັດທະນາເຂດເສດຖະກິດພິເສດ ເພື່ອດໍາເນີນກິດຈະການ ຫຼື ຂະແໜງການອື່ນ ທີ່ບໍ່ໄດ້ກໍານົດໄວ້ໃນ ມາດຕາ 2 ວັກ 2 ຂອງດໍາລັດສະບັບນີ້ ຊຶ່ງເຫັນວ່າມີຄວາມສໍາຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ລັດຖະບານຈະໄດ້ລາຍງານສະພາແຫ່ງຊາດພິຈາລະນາຕົກລົງ.

**ມາດຕາ 20 ສິດຂອງຜູ້ພັດທະນາເຂດ**

ຜູ້ພັດທະນາເຂດ ມີສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມພິເສດ ແລະ ການອໍານວຍຄວາມສະດວກ ໃນການພັດທະນາເຂດເສດຖະກິດພິເສດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
2. ໄດ້ຮັບການປົກປ້ອງການລົງທຶນ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທໍາທີ່ໄດ້ມາຈາກການລົງທຶນຂອງຕົນ;
3. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

4. ນໍາໃຊ້ທີ່ດິນຕາມອາຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
5. ເປັນເຈົ້າກໍາມະສິດຕໍ່ຊັບສິນຂອງຕົນ ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບສໍາປະທານ, ມີສິດໂອນກໍາມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
6. ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;
7. ໄດ້ຮັບສິດອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ພັນທະຂອງຜູ້ພັດທະນາ**

ຜູ້ພັດທະນາເຂດ ມີພັນທະ ດັ່ງນີ້:

1. ສ້າງຕັ້ງບໍລິສັດ ເພື່ອດໍາເນີນໂຄງການຕາມສັນຍາພັດທະນາ;
2. ປະຕິບັດຕາມສັນຍາພັດທະນາ, ແຜນແມ່ບົດການພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
3. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຢ່າງຄົບຖ້ວນ ຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ;
4. ຮ່ວມມືກັບອົງການປົກຄອງທ້ອງຖິ່ນ, ສົ່ງເສີມການມີສ່ວນຮ່ວມ ໃນການພັດທະນາຂອງປະຊາຊົນບ່ອນເຂດເສດຖະກິດພິເສດຕັ້ງຢູ່ ແລະ ປະກອບສ່ວນພັດທະນາທ້ອງຖິ່ນດັ່ງກ່າວ;
5. ສະເໜີຂໍອະນຸມັດນໍາຄະນະຄຸ້ມຄອງເຂດ ຕາມລະບຽບການກ່ຽວກັບການລົງທຶນ ເພື່ອດໍາເນີນກິດຈະການໃດໜຶ່ງ ຢູ່ໃນ ຂສພ;
6. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈໍາເປັນ ກໍສາມາດນໍາໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນຂອງ ສປປ ລາວ;
7. ສົ່ງເສີມການນໍາໃຊ້ແຮງງານລາວ ໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ;
8. ປະກອບສ່ວນທາງດ້ານງົບປະມານໃນວຽກງານຕິດຕາມ, ກວດກາໂຄງການລົງທຶນ;
9. ສະຫຼຸບລາຍງານການດໍາເນີນທຸລະກິດຂອງຕົນປະຈໍາ ສາມເດືອນ, ຫົກເດືອນ ແລະ ປະຈໍາປີ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການລົງທຶນໃນເຂດເສດຖະກິດພິເສດ

### ມາດຕາ 22 ກິດຈະການລົງທຶນ

ກິດຈະການລົງທຶນໃນເຂດເສດຖະກິດພິເສດ ປະກອບມີ:

1. ກິດຈະການທີ່ຄະນະຄຸ້ມຄອງເຂດ ຕ້ອງໄດ້ຂໍການອະນຸມັດ;

2. ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດ.

ບັນຊີກິດຈະການທີ່ຄະນະຄຸ້ມຄອງເຂດ ຕ້ອງໄດ້ຂໍການອະນຸມັດ ແລະ ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດໄດ້ ກຳນົດເປັນເອກະສານຄັດຕິດດຳລັດສະບັບນີ້.

### ມາດຕາ 23 ກິດຈະການທີ່ຄະນະຄຸ້ມຄອງເຂດ ຕ້ອງໄດ້ຂໍການອະນຸມັດ

ກິດຈະການທີ່ຄະນະຄຸ້ມຄອງເຂດ ຕ້ອງໄດ້ຂໍການອະນຸມັດ ປະກອບດ້ວຍ: ກິດຈະການທີ່ຕ້ອງຂໍອະນຸມັດ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ໂດຍສະເໜີຜ່ານຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ.

### ມາດຕາ 24 ການພິຈາລະນາກິດຈະການທີ່ຕ້ອງຂໍອະນຸມັດຈາກ ຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເປັນຜູ້ພິຈາລະນາການສະເໜີຂໍລົງທຶນ ໃນກິດຈະການທີ່ຕ້ອງຂໍອະນຸມັດຕາມການສະເໜີ ຂອງຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ.

### ມາດຕາ 25 ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດ

ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດໄດ້ ແມ່ນກິດຈະການທີ່ບໍ່ຢູ່ໃນບັນຊີຕ້ອງຂໍການອະນຸມັດ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ.

ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດໄດ້ ມີ ສອງ ປະເພດ ດັ່ງນີ້:

1. ກິດຈະການ ທີ່ຕ້ອງຂໍຄຳເຫັນ ຈາກຂະແໜງການທີ່ກ່ຽວຂ້ອງພິຈາລະນາ ແລະ ແຈ້ງຕອບພາຍໃນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຈາກຄະນະຄຸ້ມຄອງເຂດ. ຖ້າບໍ່ມີຄຳຕອບພາຍໃນ ສິບວັນ ຖືວ່າເປັນການເຫັນດີ.
2. ກິດຈະການ ທີ່ບໍ່ຈຳເປັນຕ້ອງຂໍຄຳເຫັນ ຈາກຂະແໜງການທີ່ກ່ຽວຂ້ອງພິຈາລະນາ ຄະນະຄຸ້ມຄອງເຂດສາມາດອະນຸມັດໄດ້ເລີຍ.

### ມາດຕາ 26 ການພິຈາລະນາ ກິດຈະການທີ່ຄະນະຄຸ້ມຄອງເຂດ ສາມາດອະນຸມັດ

ຄະນະຄຸ້ມຄອງເຂດຕ້ອງພິຈາລະນາ ອອກທະບຽນວິສາຫະກິດ ແລະ ໃບສົ່ງເສີມການລົງທຶນ (ກໍລະນີກິດຈະການສົ່ງເສີມ) ຢ່າງຊ້າບໍ່ໃຫ້ເກີນ ສາມ ວັນລັດຖະການ ນັບແຕ່ວັນໄດ້ຍື່ນຄຳຮ້ອງ, ປະກອບເອກະສານປະກອບທີ່ຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

### ມາດຕາ 27 ການຍື່ນຄຳຮ້ອງຂໍລົງທຶນ

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນຢູ່ໃນເຂດເສດຖະກິດພິເສດ ໃຫ້ຍື່ນຄຳຮ້ອງ ຕໍ່ຄະນະຄຸ້ມຄອງເຂດ ເພື່ອພິຈາລະນາຕາມກົນໄກການບໍລິການປະຕູດຽວ.

### ມາດຕາ 28 ເອກະສານປະກອບການຂໍລົງທຶນ

ຄຳຮ້ອງຂໍລົງທຶນໃນເຂດເສດຖະກິດພິເສດ ມີເອກະສານປະກອບ ດັ່ງນີ້:

1. ຄຳຮ້ອງຂໍລົງທຶນ;
2. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດ (ຖ້າຫາກມີຄວາມຈຳເປັນ);
3. ບົດປະເມີນຜົນກະທົບເບື້ອງຕົ້ນ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ຖ້າຫາກມີຄວາມຈຳເປັນ);
4. ສັນຍາສ້າງຕັ້ງບໍລິສັດ (ຖ້າເປັນການຮ່ວມທຶນ);
5. ກົດລະບຽບຂອງບໍລິສັດ;
6. ເອກະສານຢັ້ງຢືນຖານະການເງິນ;
7. ເອກະສານຢັ້ງຢືນການນຳໃຊ້ທີ່ດິນ;
8. ເອກະສານຢັ້ງຢືນຖານະບຸກຄົນ, ນິຕິບຸກຄົນ;
9. ເອກະສານອື່ນ ຕາມທີ່ໄດ້ກຳນົດໄວ້ ໃນຄຳຮ້ອງຂໍລົງທຶນ.

### ມາດຕາ 29 ສິດ ແລະ ພັນທະຂອງຜູ້ລົງທຶນໃນເຂດເສດຖະກິດພິເສດ

ຜູ້ລົງທຶນໃນເຂດເສດຖະກິດພິເສດ ມີສິດໄດ້ຮັບນະໂຍບາຍພິເສດ ແລະ ປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ສິດ ແລະ ພັນທະອື່ນ ຂອງຜູ້ລົງທຶນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 4
## ການສ້າງຕັ້ງຄະນະຄຸ້ມຄອງເຂດ

### ມາດຕາ 30 ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ແມ່ນກົງຈັກການຈັດຕັ້ງໜຶ່ງ ທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ມີຖານະເທົ່າພະແນກການຂັ້ນແຂວງ ປະກອບມີຂະແໜງການ, ໜ່ວຍງານ ແລະ ວິຊາການຈຳນວນໜຶ່ງ.

ແຂວງ, ນະຄອນຫຼວງ ທີ່ໄດ້ຮັບອະນຸຍາດສ້າງຕັ້ງເຂດເສດຖະກິດພິເສດ ຈະມີຄະນະຄຸ້ມຄອງເຂດຄະນະໜຶ່ງ ເປັນຜູ້ຄຸ້ມຄອງ ແລະ ບໍລິຫານເຂດເສດຖະກິດພິເສດ ເພື່ອເປັນໃຈກາງປະສານງານ ອຳນວຍຄວາມສະດວກແກ່ການພັດທະນາ ແລະ ການລົງທຶນຢູ່ໃນເຂດ.

**ມາດຕາ 31 ການແຕ່ງຕັ້ງຄະນະຄຸ້ມຄອງເຂດ**

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ມີຫົວໜ້າຄະນະຄຸ້ມຄອງເຂດ ແລະ ຮອງຫົວໜ້າຄະນະຄຸ້ມຄອງເຂດຈຳນວນໜຶ່ງ.

ຫົວໜ້າຄະນະຄຸ້ມຄອງເຂດ ມີຕຳແໜ່ງບໍລິຫານເທົ່າຫົວໜ້າພະແນກຂັ້ນແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ພາຍຫຼັງທີ່ໄດ້ຮັບການຮັບຮອງຈາກສະພາປະຊາຊົນຂັ້ນແຂວງ ແລະ ນະຄອນຫຼວງ ບົນພື້ນຖານການປະສານສົມທົບ ແລະ ຄວາມເປັນເອກະພາບກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນເຂດເສດຖະກິດພິເສດ ຕັ້ງຢູ່.

ຮອງຫົວໜ້າຄະນະຄຸ້ມຄອງເຂດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໂດຍການປຶກສາຫາລືກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນເຂດເສດຖະກິດພິເສດ ຕັ້ງຢູ່.

ດ້ານວຽກງານວິຊາການ, ງົບປະມານ, ບຸກຄະລາກອນ ຂອງຄະນະຄຸ້ມຄອງເຂດ ແມ່ນຂຶ້ນກັບກະຊວງແຜນການ ແລະ ການລົງທຶນ.

## ໝວດທີ 5
## ການຄຸ້ມຄອງວຽກງານໃນເຂດເສດຖະກິດພິເສດ ຂອງຄະນະຄຸ້ມຄອງເຂດ

**ມາດຕາ 32 ການບໍລິການການລົງທຶນປະຕູດຽວ**

ຄະນະຄຸ້ມຄອງເຂດ ສ້າງຕັ້ງໜ່ວຍງານບໍລິການການລົງທຶນປະຕູດຽວຢູ່ເຂດ, ເພື່ອປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນທັງພາຍໃນ ແລະ ຕ່າງປະເທດ ຕາມສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ:

1. ການຢັ້ງຢືນສິດນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ;
2. ການອອກທະບຽນວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນ;
3. ການອະນຸມັດຄວັດຕາປະທັບ, ການນຳເຂົ້າ-ສົ່ງອອກ;
4. ການຄຸ້ມຄອງແຮງງານ, ການເຂົ້າ-ອອກ ສປປ ລາວ ຂອງຜູ້ພັດທະນາເຂດ ແລະ ຜູ້ລົງທຶນ;
5. ການແຈ້ງເສຍອາກອນ, ແຈ້ງພາສີການນຳເຂົ້າ-ສົ່ງອອກ, ການເກັບຄ່າທຳນຽມ, ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;
6. ການຢັ້ງຢືນແຫຼ່ງກຳເນີດສິນຄ້າ;
7. ການອອກໃບອະນຸຍາດປຸກສ້າງ, ໃບຢັ້ງຢືນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
8. ການອະນຸຍາດອື່ນ ທີ່ຕິດພັນກັບການລົງທຶນ;
9. ການບໍລິການອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 33 ການຮັກສາຄວາມສະຫງົບ**

ຄະນະຄຸ້ມຄອງເຂດ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນເຂດເສດຖະກິດພິເສດຕັ້ງຢູ່ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນ ແລະ ອ້ອມຮອບເຂດຕາມກົດໝາຍ ແລະ ລະບຽບການ.

ສໍາລັບເຂດເສດຖະກິດພິເສດໃດໜຶ່ງ ທີ່ເຫັນວ່າມີຄວາມຈໍາເປັນສ້າງ ຕັ້ງໜ່ວຍງານປ້ອງກັນຄວາມສະຫງົບນັ້ນ ໃຫ້ຄະນະຄຸ້ມຄອງເຂດ ລາຍງານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອສະເໜີລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ພິຈາລະນາ.

**ມາດຕາ 34 ການເກັບກໍາຂໍ້ມູນສະຖິຕິ**

ຄະນະຄຸ້ມຄອງເຂດຕ້ອງມີລະບົບຕິດຕາມ, ເກັບກໍາຂໍ້ມູນກ່ຽວກັບການພັດທະນາ, ການລົງທຶນ, ການດໍາເນີນທຸລະກິດ ລວມທັງຂໍ້ມູນສະຖິຕິອື່ນ ທີ່ສໍາຄັນ ເພື່ອຮັບປະກັນການລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ທັນເວລາ.

**ມາດຕາ 35 ການເກັບລາຍຮັບ**

ຄະນະຄຸ້ມຄອງເຂດ ປະສານສົມທົບກັບຂະແໜງການການເງິນ ສ້າງເງື່ອນໄຂອໍານວຍຄວາມສະດວກໃນການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ຄົບຖ້ວນ, ວ່ອງໄວ ແລະ ໂປ່ງໃສ ພ້ອມທັງສະຫຼຸບລາຍງານຜົນໄດ້ຮັບ ໃນແຕ່ລະໄລຍະ ໃຫ້ພາກສ່ວນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ.

**ມາດຕາ 36 ການພັດທະນາສີມືແຮງງານ**

ຜູ້ພັດທະນາ ແລະ ຜູ້ລົງທຶນ ຕ້ອງມີແຜນພັດທະນາສີມືແຮງງານທ້ອງຖິ່ນ ແລະ ຊຸມຊົນອ້ອມຂ້າງໃນທຸກລະດັບ ໂດຍສະເພາະສ້າງພະນັກງານບໍລິຫານ, ນາຍຊ່າງສີມື, ເຕັກນິກ, ວິສາວະກອນ ໃຫ້ເພີ່ມຂຶ້ນ ເປັນແຕ່ລະໄລຍະ.

ຄະນະຄຸ້ມຄອງເຂດ ຮ່ວມກັບຜູ້ພັດທະນາ ແລະ ຜູ້ລົງທຶນ ສັງລວມຄວາມຕ້ອງການແຮງງານໃນແຕ່ລະໄລຍະ, ປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອພັດທະນາສີມືແຮງງານ ແລະ ສະໜອງໃຫ້ເຂດເສດຖະກິດພິເສດ ຕາມຄວາມຕ້ອງການໃນແຕ່ລະໄລຍະໃຫ້ພຽງພໍ.

**ມາດຕາ 37 ການຄຸ້ມຄອງ ແລະ ປົກປ້ອງແຮງງານ**

ຄະນະຄຸ້ມຄອງເຂດເປັນເຈົ້າການ ປະສານສົມທົບກັບຜູ້ພັດທະນາ ແລະ ຜູ້ລົງທຶນ ເກັບກໍາສະຖິຕິແຮງງານພາຍໃນເຂດເສດຖະກິດພິເສດ ໃນແຕ່ລະໄລຍະ ເພື່ອຄຸ້ມຄອງ, ປົກປ້ອງ ແລະ ສຶກສາອົບຮົມຜູ້ອອກແຮງງານທ້ອງຖິ່ນ ແລະ ຊຸມຊົນອ້ອມຂ້າງ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 38 ການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທໍາ ແລະ ສັງຄົມ**

ຄະນະຄຸ້ມຄອງເຂດ ຕິດຕາມ, ກວດກາ ແລະ ຊຸກຍູ້ ຜູ້ພັດທະນາ ແລະ ຜູ້ລົງທຶນ ປົກປັກຮັກສາສິ່ງແວດລ້ອມ, ສັງຄົມ ແລະ ວັດທະນະທໍາ ຮີດຄອງປະເພນີອັນດີງາມຂອງຊາດ ຕາມທີ່ໄດ້ກໍານົດໄວ້ໃນ

ສັນຍາພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ກົດໝາຍ ແລະ ລະບຽບການ.

**ມາດຕາ 39 ການປະກອບສ່ວນເຂົ້າໃນການພັດທະນາຊຸມຊົນ**

ຄະນະຄຸ້ມຄອງເຂດຊຸກຍູ້ຜູ້ພັດທະນາ ແລະ ຜູ້ລົງທຶນ ປະກອບສ່ວນເຂົ້າໃນການພັດທະນາຊຸມຊົນທ້ອງຖິ່ນ ເປັນຕົ້ນ ການປູກຝັງ ແລະ ລ້ຽງສັດ, ການຜະລິດເຄື່ອງຫັດຖະກຳ ແລະ ອື່ນໆ.

## ໝວດທີ 6
## ນະໂຍບາຍສົ່ງເສີມຕໍ່ຜູ້ພັດທະນາເຂດ

**ມາດຕາ 40 ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ**

ຜູ້ພັດທະນາເຂດ ໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນ ດັ່ງນີ້:

1. ນະໂຍບາຍດ້ານພາສີ, ສ່ວຍສາອາກອນກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

2. ຂະແໜງອຸດສາຫະກຳການຜະລິດ; ຂະແໜງບໍລິການ ການພັດທະນາອຸດສາຫະກຳການທ່ອງທ່ຽວ, ການບໍລິການທາງດ້ານສາທາລະນະສຸກ, ສຶກສາ, ກິລາ-ກາຍຍະກຳ ແລະ ການພັດທະນາອະສັງຫາລິມະຊັບ ໄດ້ຮັບນະໂຍບາຍສົ່ງເສີມດ້ານອາກອນກຳໄລ ໂດຍອີງຕາມເຂດ ທີ່ຕັ້ງ ຄື: ເຂດ 1 ຍົກເວັ້ນອາກອນກຳໄລ ສິບຫົກ ປີ ແລະ ເຂດ 2 ຍົກເວັ້ນອາກອນກຳໄລ ແປດ ປີ, ພາຍຫຼັງສິ້ນສຸດໄລຍະຍົກເວັ້ນ ຈະໄດ້ເສຍສາມສິບຫ້າສ່ວນຮ້ອຍ (35%) ຂອງອັດຕາອາກອນກຳໄລ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ ພາຍໃນກຳນົດ ຫ້າ ປີ, ຫຼັງຈາກນັ້ນ ໃຫ້ ເສຍໃນອັດຕາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ;

3. ການກໍ່ສ້າງເສັ້ນທາງ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ, ສ່ວນການກໍ່ສ້າງພື້ນຖານໂຄງລ່າງອື່ນໆ ແມ່ນໃຫ້ເສຍຫ້າ ສິບສ່ວນ ຮ້ອຍ (50%) ຂອງອັດຕາອາກອນມູນຄ່າເພີ່ມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ.

**ມາດຕາ 41 ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ**

ຜູ້ພັດທະນາເຂດ ມີສິດນຳໃຊ້ທີ່ດິນໃນເຂດເສດຖະກິດພິເສດ ແລະ ມີສິດນຳເອົາສິດດັ່ງກ່າວ ໃຫ້ເຊົ່າຕໍ່, ມອບ, ໂອນ ໃຫ້ຜູ້ລົງທຶນຕາມອາຍຸສັນຍາພັດທະນາ ພາຍຫຼັງທີ່ໄດ້ພັດທະນາສຳເລັດຢ່າງໜ້ອຍສີ່ສິບຫ້າສ່ວນຮ້ອຍ (45%) ຂອງແຜນພັດທະນາໃນແຕ່ລະໄລຍະ ຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດການພັດທະນາ ໂດຍມີການຢັ້ງຢືນຂອງຄະນະຄຸ້ມຄອງເຂດ.

**ມາດຕາ 42 ນະໂຍບາຍອື່ນ**

ຜູ້ພັດທະນາເຂດ ໄດ້ຮັບນະໂຍບາຍຊ່ວຍໜູນການລົງທຶນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ

ການສົ່ງເສີມການລົງທຶນ.

ຜູ້ພັດທະນາຈະໄດ້ຮັບນະໂຍບາຍສົ່ງເສີມເພີ່ມເຕີມ ບົນພື້ນຖານການເຈລະຈາ ແລະ ການຕົກລົງໃນສັນຍາ ໂດຍອີງຕາມເງື່ອນໄຂ, ທີ່ຕັ້ງ, ຈຸດພິເສດ ເປັນຕົ້ນ ເຂດຫ່າງໄກສອກຫຼີກ, ກິດຈະການທີ່ລັດຖະບານສົ່ງເສີມພິເສດ.

## ໝວດທີ 7
## ນະໂຍບາຍສົ່ງເສີມຕໍ່ຜູ້ລົງທຶນ

### ມາດຕາ 43 ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ

ຜູ້ລົງທຶນ ໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນ ດັ່ງນີ້:

1. ນະໂຍບາຍດ້ານພາສີ, ສ່ວຍສາອາກອນກ່ຽວກັບການນໍາເຂົ້າ ແລະ ສົ່ງອອກ ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

2. ການລົງທຶນໃນກິດຈະການຕາມຂະແໜງການທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຈະໄດ້ຮັບການຍົກເວັ້ນອາກອນກໍາໄລເພີ່ມອີກ ສອງ ປີ ຈາກໄລຍະຍົກເວັ້ນອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ວັກ 2 ແລະ ວັກ 3 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ນອກຈາກນີ້ ສໍາລັບການລົງທຶນໃນກິດຈະການຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂໍ້ 3, 4, 5 ແລະ ຂໍ້ 6 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຫຼັງຈາກສິ້ນສຸດ ໄລຍະຍົກເວັ້ນອາກອນກໍາໄລແລ້ວ ຈະໄດ້ເສຍ ສາມສິບຫ້າສ່ວນຮ້ອຍ (35%) ຂອງອັດຕາອາກອນກໍາໄລຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍສ່ວຍສາອາກອນ ພາຍໃນກໍານົດ ຫ້າ ປີ; ຫຼັງຈາກນັ້ນ ໃຫ້ເສຍອາກອນກໍາໄລຕາມທີ່ໄດ້ ກໍານົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ;

3. ການກໍ່ສ້າງໂຮງງານ ເພື່ອທໍາການຜະລິດສິ່ງອອກຕ່າງປະເທດຮ້ອຍສ່ວນຮ້ອຍ (100%) ຈະໄດ້ຮັບການ ຍົກເວັ້ນອາກອນມູນຄ່າເພີ່ມ ແລະ ໄດ້ຮັບນະໂຍບາຍສໍາລັບການຊົມໃຊ້ກະແສໄຟຟ້າ ແລະ ນໍ້າປະປາ ເຂົ້າໃນການຜະລິດ ໂດຍໃຫ້ເສຍ ຫ້າສິບສ່ວນຮ້ອຍ (50%) ຂອງອັດຕາອາກອນມູນຄ່າເພີ່ມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ;

4. ສໍາລັບການກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ຮັບໃຊ້ການດໍາເນີນທຸລະກິດຂອງຜູ້ລົງທຶນໃນຂະແໜງກິດຈະການທີ່ບໍ່ແມ່ນການຜະລິດເພື່ອສົ່ງອອກຮ້ອຍສ່ວນຮ້ອຍ ໃຫ້ເສຍ ຫ້າສິບສ່ວນຮ້ອຍ (50%) ຂອງ ອັດຕາອາກອນມູນຄ່າເພີ່ມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ;

5. ການນໍາເຂົ້າວັດຖຸດິບ, ວັດຖູປະກອນ ແລະ ຊິ້ນສ່ວນທີ່ຮັບໃຊ້ການຜະລິດ, ການປຸງແຕ່ງ ຫຼື ປະກອບຢູ່ພາຍໃນເຂດເສດຖະກິດພິເສດ ເພື່ອເປັນສິນຄ້າຈໍາໜ່າຍພາຍໃນປະເທດ ຕ້ອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບພາສີ ແລະ ສ່ວຍສາອາກອນ.

ນອກຈາກນີ້ ຜູ້ລົງທຶນຍັງໄດ້ຮັບນະໂຍບາຍດ້ານອາກອນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

### ມາດຕາ 44 ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ

ຜູ້ລົງທຶນ ມີສິດນຳໃຊ້ທີ່ດິນທີ່ຕົນໄດ້ເຊົ່າ ໂດຍສາມາດເອົາສິດດັ່ງກ່າວ ໃຫ້ເຊົ່າຕໍ່ ຫຼື ມອບ, ໂອນ ໃຫ້ຜູ້ລົງທຶນອື່ນ ຕາມອາຍຸສັນຍາເຊົ່າ ແຕ່ສູງສຸດບໍ່ໃຫ້ເກີນອາຍຸສັນຍາພັດທະນາທີ່ຍັງເຫຼືອ ໂດຍມີການຢັ້ງຢືນຂອງຄະນະຄຸ້ມຄອງເຂດ.

ຜູ້ທີ່ໄດ້ກຳມະສິດໃນອະສັງຫາລິມະຊັບຢູ່ໃນ ຂສພ ແມ່ນສາມາດເປັນເຈົ້າກຳມະສິດໄປຕະຫຼອດຈົນໝົດອາຍຸຂອງການນຳໃຊ້ອະສັງຫາລິມະຊັບນັ້ນ ຊຶ່ງສາມາດຂາຍ, ມອບ, ໂອນ ຫຼື ສືບທອດຕໍ່ໄດ້, ສ່ວນທີ່ດິນ ບ່ອນທີ່ອະສັງຫາລິມະຊັບນັ້ນຕັ້ງຢູ່ ພາຍຫຼັງໝົດອາຍຸສັນຍາພັດທະນາແລ້ວ ແມ່ນກັບມາເປັນຊັບສິນຂອງລັດ ຊຶ່ງເຈົ້າກຳມະສິດຂອງອະສັງຫາລິມະຊັບນັ້ນ ສາມາດເຊົ່າທີ່ດິນນຳລັດ ຫຼື ດ້ວຍວິທີການອື່ນ ໂດຍສອດຄ່ອງຕາມລະບຽບກົດໝາຍ.

ຄົນຕ່າງປະເທດທີ່ໄດ້ກຳມະສິດ ອະສັງຫາລິມະຊັບ (ສິ່ງປຸກສ້າງທີ່ຢູ່ອາໄສພາຍໃນເຂດ) ໂດຍໄດ້ມີການຊຳລະຕົວຈິງ 100,000 ໂດລາສະຫະລັດ ຂຶ້ນໄປ ພ້ອມດ້ວຍເມຍ ຫຼື ຜົວ ແລະ ລູກ ຈະໄດ້ຮັບນະໂຍບາຍວິຊາ ເຂົ້າ-ອອກຫຼາຍເທື່ອຄັ້ງທຳອິດເປັນເວລາ ສິບ ປີ ແລະ ສາມາດຕໍ່ໄດ້, ນອກຈາກນີ້ ຍັງຈະໄດ້ຮັບການອຳນວຍຄວາມສະດວກອື່ນໆ ຕາມການຕົກລົງຂອງລັດຖະບານ ໃນແຕ່ລະໄລຍະ.

ສຳລັບຄົນຕ່າງປະເທດທີ່ມີສັນຍາເຊົ່າ ອະສັງຫາລິມະຊັບ (ສິ່ງປຸກສ້າງທີ່ຢູ່ອາໄສພາຍໃນເຂດ) ຈາກເຈົ້າຂອງກຳມະສິດ ແລະ ມີກຳນົດເວລາຢູ່ ສປປ ລາວ ສາມເດືອນຂຶ້ນໄປ ຈະໄດ້ຮັບນະໂຍບາຍວິຊາເຂົ້າ-ອອກຫຼາຍ ເທື່ອ.

### ມາດຕາ 45 ນະໂຍບາຍອື່ນ

ຜູ້ລົງທຶນ ໄດ້ຮັບນະໂຍບາຍຊ່ວຍໜູນການລົງທຶນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

## ໝວດທີ 8
## ກົນໄກການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ

### ມາດຕາ 46 ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມສຳລັບຜູ້ພັດທະນາເຂດ

ນະໂຍບາຍສົ່ງເສີມຂອງຜູ້ພັດທະນາເຂດ ໄດ້ກຳນົດໄວ້ໃນໃບອະນຸຍາດລົງທຶນ.

ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ ມີດັ່ງນີ້:

1. ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດການໃຫ້ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດລົງທຶນ;

2. ການຍົກເວັ້ນພາສີ, ອາກອນນຳເຂົ້າວັດຖຸດິບ, ອຸປະກອນ ແລະ ພາຫະນະຮັບໃຊ້ການຜະລິດໂດຍກົງ ຂອງຜູ້ພັດທະນາເຂດ ຕ້ອງສະເໜີແຜນນຳເຂົ້າ ຕໍ່ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ເພື່ອປະສານກັບຂະແໜງການກ່ຽວຂ້ອງ ພິຈາລະນາຮັບຮອງ;

3. ການນຳເຂົ້າຕົວຈິງ ໃຫ້ຂະແໜງພາສີ, ອາກອນ ເປັນຜູ້ຈັດຕັ້ງປະຕິບັດຕາມແຜນນຳເຂົ້າທີ່ໄດ້ຮັບຮອງເອົາແລ້ວ. ໃນກໍລະນີມີຄວາມຕ້ອງການນຳເຂົ້າເພີ່ມ ຫຼື ຫຼຸດຕາມຄວາມຈຳເປັນ ຕ້ອງສະເໜີຕໍ່

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ພິຈາລະນາ.

**ມາດຕາ 47 ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມສໍາລັບຜູ້ລົງທຶນ**

ນະໂຍບາຍສົ່ງເສີມຂອງຜູ້ລົງທຶນ ໄດ້ກໍານົດໄວ້ໃນໃບສົ່ງເສີມການລົງທຶນ.

ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ ມີດັ່ງນີ້:

1. ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດການໃຫ້ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ ຕາມທີ່ໄດ້ກໍານົດໄວ້ໃນໃບສົ່ງເສີມການລົງທຶນ;

2. ການຍົກເວັ້ນພາສີ, ອາກອນນໍາເຂົ້າວັດຖຸດິບ, ອຸປະກອນ ແລະ ພາຫະນະຮັບໃຊ້ການຜະລິດໂດຍກົງ ຂອງຜູ້ລົງທຶນ ຕ້ອງສະເໜີແຜນນໍາເຂົ້າປະຈໍາປີ ຕໍ່ຄະນະຄຸ້ມຄອງເຂດ ພິຈາລະນາຮັບຮອງ ໂດຍຜ່ານການປະສານສົມທົບກັບຂະແໜງການກ່ຽວຂ້ອງ;

3. ການນໍາເຂົ້າຕົວຈິງ ໃຫ້ຂະແໜງພາສີ, ອາກອນ ເປັນຜູ້ຈັດຕັ້ງປະຕິບັດຕາມແຜນນໍາເຂົ້າທີ່ໄດ້ຮັບຮອງເອົາແລ້ວ. ໃນກໍລະນີມີຄວາມຕ້ອງການນໍາເຂົ້າເພີ່ມ ຫຼື ຫຼຸດຕາມຄວາມຈໍາເປັນ ຕ້ອງສະເໜີຄະນະຄຸ້ມຄອງເຂດ ພິຈາລະນາ.

**ມາດຕາ 48 ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມອື່ນ**

ຄະນະຄຸ້ມຄອງເຂດ ເປັນໃຈກາງປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕີລາຄາຢັ້ງຢືນການປະກອບສ່ວນຂອງຜູ້ພັດທະນາເຂດ ແລະ ຜູ້ລົງທຶນ ເພື່ອລາຍງານຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ພິຈາລະນານະໂຍບາຍສົ່ງເສີມ, ຍ້ອງຍໍ ຫຼື ຫຼຸດຜ່ອນອັດຕາພາສີ, ອາກອນຕາມ ລະບຽບການ.

## ໝວດທີ 9
## ທີ່ດິນເຂດເສດຖະກິດພິເສດ

**ມາດຕາ 49 ການກໍານົດທີ່ດິນເຂດເສດຖະກິດພິເສດ**

ລັດ ຈັດສັນທີ່ດິນສະເພາະໜ້າດິນ ຊຶ່ງບໍ່ກວມເອົາຊັບສົມບັດ ແລະ ຊັບພະຍາກອນທໍາມະຊາດອື່ນທີ່ຢູ່ໜ້າດິນ ແລະ ພື້ນດິນ ເພື່ອສ້າງຕັ້ງເຂດເສດຖະກິດພິເສດ ໂດຍສອດຄ່ອງກັບແຜນການຈັດສັນທີ່ດິນແຫ່ງຊາດ.

**ມາດຕາ 50 ການປັກຫຼັກເຂດສໍາປະທານ**

ພາຍຫຼັງໄດ້ເຊັນສັນຍາພັດທະນາເຂດເສດຖະກິດພິເສດແລ້ວ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາເຂດ ເພື່ອປັກຫຼັກເຂດສໍາປະທານ ຕາມການອະນຸມັດຂອງລັດຖະບານ.

**ມາດຕາ 51 ການອອກໃບຢັ້ງຢືນສິດນໍາໃຊ້ທີ່ດິນ**

ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ອອກໃບຢັ້ງຢືນສິດນໍາໃຊ້ທີ່ດິນໃຫ້ແກ່ຜູ້ພັດທະນາເຂດ.

ຄະນະຄຸ້ມຄອງເຂດ ເປັນຜູ້ອອກໃບຢັ້ງຢືນກ່ຽວກັບການນຳໃຊ້ທີ່ດິນ ຢູ່ພາຍໃນເຂດເສດຖະກິດພິເສດ ໃຫ້ແກ່ຜູ້ລົງທຶນ.

**ມາດຕາ 52 ການນຳໃຊ້ພື້ນທີ່ດິນ**

ຜູ້ພັດທະນາເຂດ ແລະ ຜູ້ລົງທຶນ ນຳໃຊ້ພື້ນທີ່ດິນເຂົ້າໃນເປົ້າໝາຍການດຳເນີນທຸລະກິດໂດຍກົງ ບໍ່ໃຫ້ເກີນ ແປດສິບສ່ວນຮ້ອຍ (80%) ຂອງເນື້ອທີ່ທັງໝົດ, ສ່ວນທີ່ເຫຼືອ ໃຫ້ພັດທະນາເປັນພື້ນທີ່ສາທາລະນະປະໂຫຍດ ເປັນຕົ້ນ ສວນສາທາລະນະ, ພື້ນທີ່ສີຂຽວ.

**ມາດຕາ 53 ການທົດແທນຄ່າເສຍຫາຍ**

ໃນກໍລະນີການກຳນົດເຂດພື້ນທີ່ດິນທີ່ສ້າງຕັ້ງເປັນເຂດເສດຖະກິດພິເສດ ຫາກກວມເອົາດິນທີ່ລັດ ໄດ້ອອກສິດນຳໃຊ້ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ.

ອົງການປົກຄອງທ້ອງຖິ່ນບ່ອນເຂດເສດຖະກິດພິເສດຕັ້ງຢູ່ ມີໜ້າທີ່ໃນການຈັດສັນ, ສຳຫຼວດ, ແກ້ໄຂ ແລະ ປະເມີນກ່ຽວກັບບັນຫາທີ່ດິນ ເພື່ອໃຊ້ແທນຄ່າເສຍຫາຍຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ.

## ໝວດທີ 10
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 54 ອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານເຂດເສດຖະກິດພິເສດຢ່າງລວມສູນ ແລະ ເປັນເອກະພາບໃນ ຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດປະກອບດ້ວຍ:

1. ກະຊວງແຜນການ ແລະ ການລົງທຶນ;
2. ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ;
3. ຄະນະຄຸ້ມຄອງເຂດ;
4. ອົງການປົກຄອງແຂວງ, ນະຄອນຫຼວງ;
5. ຂະແໜງການອື່ນ

**ມາດຕາ 55 ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງວຽກງານເຂດເສດຖະກິດພິເສດ, ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ວາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບເຂດເສດ

ຖະກິດພິເສດ ເພື່ອສະເໜີລັດຖະບານພິຈາລະນາ;

2. ສ້າງແຜນການ, ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳກ່ຽວກັບວຽກງານເຂດເສດຖະກິດພິເສດ;
3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດ;
4. ຄົ້ນຄວ້າກ່ຽວກັບການສ້າງຕັ້ງ ຫຼື ການຍຸບເລີກເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດ ເພື່ອສະເໜີຄະນະສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ລັດຖະບານພິຈາລະນາ;
5. ຄົ້ນຄວ້າ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ;
6. ຄົ້ນຄວ້າພິຈາລະນາຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາທີ່ເປັນການລະເມີດກົດໝາຍກ່ຽວກັບວຽກງານເຂດເສດຖະກິດພິເສດ;
7. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂການກະທຳທີ່ລະເມີດກົດໝາຍ ໃນການປະຕິບັດວຽກງານເຂດເສດຖະກິດພິເສດ ໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
8. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບເຂດເສດຖະກິດພິເສດ;
9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານເຂດເສດຖະກິດ ພິເສດ;
10. ສະຫຼຸບ, ສັງລວມ, ຕີລາຄາປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານເຂດເສດຖະກິດພິເສດ ໃຫ້ລັດຖະບານຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບ ໝາຍຂອງລັດຖະບານ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ**

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ມີຖານະເທົ່າກົມຂຶ້ນກັບ ກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ຮັບການຊີ້ນຳຈາກລັດຖະມົນຕີ, ຮອງລັດຖະມົນຕີ ຕາມການມອບໝາຍ.

ໃນການຄຸ້ມຄອງວຽກງານເຂດເສດຖະກິດພິເສດ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະ

ກິດພິເສດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ກະຊວງແຜນການ ແລະ ການລົງທຶນ ໃນການຄົ້ນຄວ້າ, ວາງນະໂຍບາຍ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບເຂດເສດຖະກິດພິເສດ;
2. ຄົ້ນຄວ້າອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດວຽກງານເຂດເສດຖະກິດພິເສດ;
3. ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບເຂດເສດຖະກິດພິເສດ ແລະ ຊີ້ນຳຈັດຕັ້ງປະຕິບັດ ຕາມຄວາມຮັບຜິດຊອບຂອງຕົນ;
4. ຄົ້ນຄວ້າກ່ຽວກັບການສ້າງຕັ້ງ ຫຼື ການຍຸບເລີກ ເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດ ເພື່ອສະເໜີກະຊວງແຜນການ ແລະ ການລົງທຶນ ພິຈາລະນາ;
5. ຄົ້ນຄວ້າກ່ຽວກັບການອະນຸມັດ ແລະ ການຍົກເລີກກິດຈະການທີ່ຢູ່ໃນບັນຊີຄວບຄຸມທີ່ບໍ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຄະນະຄຸ້ມຄອງເຂດ ເພື່ອສະເໜີຄະນະສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາ;
6. ຄົ້ນຄວ້າປະກອບຄຳເຫັນກ່ຽວກັບການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າ ຄະນະຄຸ້ມຄອງເຂດ;
7. ຄົ້ນຄວ້າ ແລະ ສະເໜີມາດຕະການ, ວິທີການແກ້ໄຂການກະທຳທີ່ລະເມີດກົດໝາຍໃນການປະຕິບັດວຽກງານເຂດເສດຖະກິດພິເສດ ໃຫ້ມີຄວາມໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຕໍ່ກະຊວງແຜນການ ແລະ ການລົງທຶນ ພິຈາລະນາ;
8. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານເຂດເສດຖະກິດພິເສດ;
9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານເຂດເສດຖະກິດພິເສດ ຕາມການມອບໝາຍຂອງຂັ້ນເທິງ;
10. ຮັບຄຳຮ້ອງ, ຄຳສະເໜີ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ກ່ຽວກັບຂໍ້ຫຍຸ້ງຍາກຕ່າງໆ ໃນການດຳເນີນທຸລະກິດ ແລະ ປະສານກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂ;
11. ຈັດກອງປະຊຸມປະຈຳຫົກເດືອນ ຫຼື ໜຶ່ງປີ ຮ່ວມກັບຄະນະຄຸ້ມຄອງເຂດ ແລະ ຜູ້ພັດທະນາ;
12. ສະຫຼຸບ, ສັງລວມ, ຕີລາຄາປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານເຂດເສດຖະກິດພິເສດ ໃຫ້ກະຊວງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 57 ສິດ ແລະ ໜ້າທີ່ຂອງຄະນະຄຸ້ມຄອງເຂດ**

ໃນການຄຸ້ມຄອງວຽກງານເຂດເສດຖະກິດພິເສດ, ຄະນະຄຸ້ມຄອງເຂດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດສັນຍາພັດທະນາ, ແຜນແມ່ບົດການພັດທະນາເຂດ, ແຜນງານ ແລະ ໂຄງການການລົງທຶນ ໃນແຕ່ລະໄລຍະ;
2. ພິຈາລະນາອະນຸມັດການລົງທຶນໃນເຂດເສດຖະກິດພິເສດ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ; ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ, ອະສັງຫາລິມະຊັບ, ສິ່ງປຸກສ້າງຕ່າງໆພາຍໃນເຂດ, ເອກະສານກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ, ວັດຖຸປະກອບຮັບໃຊ້ການຜະລິດ, ການກໍ່ສ້າງພື້ນຖານໂຄງລ່າງ; ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ; ຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ ໂດຍສອດຄ່ອງກັບລະບຽບການ;
3. ໂຄສະນາດຶງດູດການພັດທະນາ ຫຼື ການລົງທຶນໃນເຂດເສດຖະກິດພິເສດ ລວມທັງເຜີຍແຜ່ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານກ່ຽວກັບເຂດເສດຖະກິດພິເສດ;
4. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນເຂດເສດຖະກິດພິເສດຕັ້ງຢູ່ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄຸ້ມຄອງຜູ້ຢູ່ອາໄສ ແລະ ຜູ້ອອກແຮງງານພາຍໃນເຂດ;
5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍການມອບສິດໃນການພິຈາລະນາອອກໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ ແລະ ການເກັບອາກອນ, ໃບອະນຸຍາດການປຸກສ້າງ, ໃບຢັ້ງຢືນບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ບັດອະນຸຍາດອອກແຮງງານ, ບັດພັກເຊົາ ແລະ ເອກະສານອື່ນ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານເຂດເສດຖະກິດພິເສດ ມີຄວາມສະດວກຄ່ອງຕົວ;
6. ປະສານສົມທົບກັບຜູ້ພັດທະນາເຂດ, ຜູ້ລົງທຶນ ແລະ ອົງການປົກຄອງທ້ອງຖິ່ນໃນການສ້າງໂຄງການພັດທະນາທີ່ມີສ່ວນຮ່ວມກັບປະຊາຊົນ ແລະ ໂຄງການພື້ນຖານໂຄງລ່າງໃນເຂດເຊື່ອມຕໍ່ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
7. ຕິດຕາມການປະຕິບັດພັນທະຕ່າງໆຕາມສັນຍາ, ລາຍຮັບ-ລາຍຈ່າຍຕ່າງໆ ຂອງເຂດເສດຖະກິດພິເສດ ຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
8. ກຳນົດມາດຕະການປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນການພັດທະນາແບບຍືນຍົງ;
9. ຄຸ້ມຄອງຈັດສັນ ແລະ ນຳໃຊ້ທີ່ດິນ, ສິ່ງປຸກສ້າງຕ່າງໆຕາມລະບຽບການ;
10. ຈັດກອງປະຊຸມປະຈຳເດືອນ ເພື່ອປຶກສາຫາລືແກ້ໄຂວຽກງານຂອງຕົນ;
11. ສະຫຼຸບ, ລາຍງານຜົນການເຄື່ອນໄຫວປະຈຳອາທິດ, ເດືອນ, ໄຕມາດ, ຫົກເດືອນ, ປີ ພ້ອມ

ທັງສັງລວມ ບັນຊີການອະນຸມັດກິດຈະການລົງທຶນໃນເຂດ ໃຫ້ຂະແໜງການແຜນການ ແລະ ການລົງທຶນ, ອົງການປົກຄອງຂັ້ນແຂວງ ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ ແລະ ຂັ້ນສູນກາງ; ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 58 ສິດ ແລະ ໜ້າທີ່ຂອງອົງການປົກຄອງແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານເຂດເສດຖະກິດພິເສດ, ອົງການປົກຄອງແຂວງ, ນະຄອນຫຼວງບ່ອນເຂດເສດຖະກິດພິເສດຕັ້ງຢູ່ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍການພັດທະນາເຂດເສດຖະກິດພິເສດໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ການສະໜັບສະໜູນ;
2. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ເຂດເສດຖະກິດພິເສດຢູ່ແຂວງ, ນະຄອນຫຼວງ ຂອງຕົນ ໄດ້ເຄື່ອນໄຫວວຽກງານພັດທະນາເຂດເສດຖະກິດພິເສດ;
3. ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາທາງດ້ານວັດທະນະທຳ-ສັງຄົມ, ການສ້າງໂຄງການ ແລະ ການຂຶ້ນແຜນການລົງທຶນ ເພື່ອກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນໃຫ້ແກ່ການຮອງຮັບ, ການສະໜັບສະໜູນ ຫຼື ການເຊື່ອມຕໍ່ກັບເຂດເສດຖະກິດພິເສດໃນທ້ອງຖິ່ນຂອງຕົນ;
4. ສ້າງກິດຈະກຳທີ່ຕິດພັນກັບການພັດທະນາເຂດເສດຖະກິດພິເສດ ເພື່ອໃຫ້ປະຊາຊົນໄດ້ຜົນປະໂຫຍດຮ່ວມເປັນຕົ້ນ ການສ້າງກິດຈະການປົ່ນອ້ອມ, ການຜະລິດ ແລະ ການສະໜອງວັດຖຸດິບ, ຜະລິດຕະພັນ, ສະບຽງອາຫານ ແລະ ອື່ນໆ;
5. ຈັດສັນ, ສຳຫຼວດ, ແກ້ໄຂ ແລະ ປະເມີນກ່ຽວກັບບັນຫາທີ່ດິນ ເພື່ອໃຊ້ແທນຄ່າເສຍຫາຍຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ;
6. ປະສານສົມທົບກັບຄະນະຄຸ້ມຄອງເຂດ ເພື່ອແກ້ໄຂຄວາມຫຍຸ້ງຍາກ ແລະ ອຳນວຍຄວາມສະດວກໃນການພັດທະນາເຂດເສດຖະກິດພິເສດ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 59 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ຂະແໜງການອື່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນໃນການຮ່ວມມືປະສານສົມທົບ, ອຳນວຍຄວາມສະດວກໃຫ້ຄະນະຄຸ້ມຄອງເຂດ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ໂດຍແຕ່ງຕັ້ງບຸກຄະລາກອນຂອງຕົນ ປະກອບເຂົ້າໃນໜ່ວຍງານບໍລິການການລົງທຶນປະຕູດຽວໃນເຂດ.

**ມາດຕາ 60 ການກວດກາ**

ການກວດກາວຽກງານເຂດເສດຖະກິດພິເສດ ໂດຍຫຼັກການໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານເຂດເສດຖະກິດພິເສດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 61 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການພັດທະນາ, ການຄຸ້ມຄອງ ແລະ ການລົງທຶນຢູ່ໃນເຂດເສດຖະກິດພິເສດ ທີ່ມີປະສິດທິຜົນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຶງດູດ ແລະ ການຊຸກຍູ້ການພັດທະນາເຂດເສດຖະກິດພິເສດ ຫຼື ການລົງທຶນໃນເຂດເສດຖະກິດພິເສດ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 62 ມາດຕະການຕໍ່ຜູ້ລະເມີດ**

ນອກຈາກມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນແລ້ວ ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຍັງຈະຖືກປະຕິບັດມາດຕະການຕ່າງໆ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

ການລະເມີດກ່ຽວກັບການບໍ່ເສຍພັນທະດ້ານພາສີ, ສ່ວຍສາອາກອນ, ການລະເມີດສັນຍາສຳປະທານ, ການປຸກສ້າງອາຄານ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ການລະເມີດອື່ນໆ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 63 ການຈັດຕັ້ງປະຕິບັດ**

ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 64 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ສະບັບເລກທີ 443/ນຍ, ລົງວັນທີ 26 ຕຸລາ 2010 ແລະ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍ ນະໂຍບາຍເພີ່ມເຕີມຂອງການລົງທຶນຢູ່ເຂດເສດຖະກິດສະເພາະບຶງທາດຫຼວງ ແລະ ຂພສ ໃນຂອບເຂດ ທົ່ວປະເທດ ສະບັບເລກທີ 73/ນຍ, ລົງວັນທີ 28 ກັນຍາ 2015.

ບັນດາເຂດເສດຖະກິດພິເສດ ທີ່ໄດ້ຮັບອະນຸຍາດ ແລະ ໄດ້ຮັບຜົນປະໂຫຍດພາຍໃຕ້ນິຕິກຳກ່ຽວ ກັບເຂດເສດຖະກິດພິເສດ ແລະ ສັນຍາທີ່ໄດ້ເຊັນກັບລັດຖະບານກ່ອນໜ້ານີ້ ແມ່ນບໍ່ມີການປ່ຽນແປງ ຈົນກວ່າຈະສິ້ນສຸດສັນຍາ. ຍົກເວັ້ນ ມາດຕາ 95 ແລະ ມາດຕາ 96 ຂອງດຳລັດວ່າດ້ວຍເຂດເສດຖະກິດ ພິເສດ ແລະ ເຂດເສດຖະກິດສະເພາະ ສະບັບເລກທີ 443/ນຍ, ລົງວັນທີ 26 ຕຸລາ 2010 ແລະ ມາດຕາ 13 ຂອງຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 73/ນຍ, ລົງວັນທີ 28 ກັນຍາ 2015 ວ່າດ້ວຍ ນະໂຍບາຍເພີ່ມເຕີມຂອງການລົງທຶນຢູ່ເຂດເສດຖະກິດສະເພາະບຶງທາດຫຼວງ ແລະ ຂພສ ໃນຂອບເຂດ ທົ່ວປະເທດ ແມ່ນໃຫ້ປະຕິບັດຕາມດຳລັດ ສະບັບນີ້.

**ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**



ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ                                                                                   ເລກທີ 03 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 10. 01. 2019

# ດຳລັດ

## ວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2994/ກຜທ.ລທ4, ລົງວັນທີ 29 ພະຈິກ 2018.

## ນາຍົກລັດຖະມົນຕີ ອອກດຳລັດ :

**ມາດຕາ 1** ຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ຕາມ ເອກະສານ ຄັດຕິດ “ກ” ຂອງດຳລັດສະບັບນີ້.

**ມາດຕາ 2** ບັນຊີກິດຈະການຄວບຄຸມ ແມ່ນບັນຊີປະເພດທຸລະກິດ ທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນການພັດທະນາບັນດາຂະແໜງເສດຖະກິດ ແລະ ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງໝັ້ນທ່ຽງ ຊຶ່ງການລົງທຶນໃນບັນຊີກິດຈະການຄວບຄຸມ ຕ້ອງໄດ້ຜ່ານການພິຈາລະນາ ແລະ ມີຄຳເຫັນໂດຍບັນດາຂະແໜງການທີ່ກ່ຽວຂ້ອງ, ຫຼັງຈາກນັ້ນ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຜູ້ពິກລົງອະນຸຍາດການລົງທຶນ.

ສ່ວນບັນຊີກິດຈະການສຳປະທານ ແມ່ນບັນຊີປະເພດທຸລະກິດ ທີ່ຜູ້ລົງທຶນໄດ້ຮັບອະນຸຍາດໃນການສຳປະທານຈາກລັດ ເປັນຕົ້ນການສຳປະທານທີ່ດິນ, ການພັດທະນາເຂດເສດຖະກິດ

ພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງ ເພື່ອສົ່ງອອກ, ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານ, ການສຳປະທານສາຍການບິນ ແລະ ໂທລະຄົມມະນາຄົມ.

**ມາດຕາ 3** ລັດສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການທີ່ກຳນົດໃນ ແລະ ນອກ ບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ຍົກເວັ້ນກິດຈະການ ແລະ ເຂດທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມ ໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ, ລວມທັງບັນຊີປະເພດທຸລະກິດ ທີ່ເກືອດຫ້າມ.

ຂັ້ນຕອນຍື່ນຄຳຮ້ອງຂໍອະນຸຍາດລົງທຶນກິດຈະການໃນບັນຊີຄວບຄຸມ: ໃຫ້ຍື່ນຄຳຮ້ອງຂໍລົງທຶນຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມການແບ່ງຂັ້ນອະນຸມັດທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ "ກ" ຂອງດຳລັດສະບັບນີ້, ຫ້ອງການບໍລິການການລົງທຶນປະຕູດຽວ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າ ແລ້ວນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນເວລາ ຊາວຫ້າວັນ ລັດຖະການ ນັບແຕ່ວັນຫ້ອງການບໍລິການການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນເປັນຕົ້ນໄປ. ຫຼັງຈາກໄດ້ຮັບໃບອະນຸຍາດລົງທຶນແລ້ວ ໃຫ້ວິສາຫະກິດສ່ວນບຸກຄົນ ຫຼື ນິຕິບຸກຄົນດັ່ງກ່າວ ສາມາດເຄື່ອນໄຫວການລົງທຶນຕາມກົດໝາຍ, ໃນກໍລະນີກິດຈະການລົງທຶນທີ່ມີກົດໝາຍ ຫຼື ນິຕິກຳຂອງຂະແໜງການກຳນົດໃຫ້ມີໃບອະນຸຍາດສະເພາະ ກ່ອນການເປີດດຳເນີນທຸລະກິດ ບັນດາວິສາຫະກິດດັ່ງກ່າວ ຕ້ອງສະເໜີຂໍໃບອະນຸຍາດດັ່ງກ່າວ ຕາມນິຕິກຳທີ່ກຳນົດໄວ້.

ສ່ວນວິສາຫະກິດສ່ວນບຸກຄົນ ຫຼື ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍ ວ່າດ້ວຍວິສາຫະກິດ ຂອງ ສປປ ລາວ ມາແລ້ວ ຫາກຢາກຂໍອະນຸຍາດລົງທຶນ ຫຼື ດຳເນີນທຸລະກິດໃໝ່ ຫຼື ເພີ່ມກິດຈະການ ໃນກິດຈະການຄວບຄຸມແມ່ນໃຫ້ຍື່ນຄຳຮ້ອງ ໂດຍກົງຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຕາມທີ່ກຳນົດໃນຂ້າງເທິງນີ້.

ສຳລັບກິດຈະການການລົງທຶນສຳປະທານ: ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນ ໃນກິດຈະການການລົງທຶນສຳປະທານ ຢູ່ ສປປ ລາວ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ( ດັ່ງທີ່ກຳນົດໃນເອກະສານຊ້ອນທ້າຍ "ກ" ຂອງ ດຳລັດສະບັບນີ້) ພິຈາລະນາ ພາຍໃນເວລາ ຫົກສິບຫ້າ ວັນລັດຖະການ ນັບແຕ່ວັນຫ້ອງການບໍລິການການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນເປັນຕົ້ນໄປ.

**ມາດຕາ 4** ໃຫ້ຂະແໜງງການທີ່ກ່ຽວຂ້ອງປັບປຸງ ຫຼື ສ້າງນິຕິກຳ ກ່ຽວກັບຄວາມຕ້ອງການທາງດ້ານເອກະສານ ແລະ ຂັ້ນຕອນການພິຈາລະນາການອອກອະນຸຍາດລົງທຶນ ທີ່ກ່ຽວຂ້ອງກັບຂະແໜງການ

ຂອງຕົນ ໃຫ້ລະອຽດຈະແຈ້ງ, ງ່າຍດາຍ ແລະ ສົ່ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອແຈ້ງໃຫ້ນັກລົງທຶນ.

**ມາດຕາ 5** ບັນດາຂະແໜງການທີ່ກ່ຽວຂ້ອງ ສາມາດສະເໜີປັບປຸງ, ເພີ່ມ ຫຼື ຫຼຸດ ລາຍການປະເພດທຸລະກິດ ທີ່ຂະແໜງການຕົນຮັບຜິດຊອບ ໃນບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຕາມຄວາມຈຳເປັນ ໂດຍສອດຄ່ອງກັບນະໂຍບາຍໃນແຕ່ລະໄລຍະ ຂອງຂະແໜງການກ່ຽວຂ້ອງ ໂດຍສະເໜີຜ່ານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາ ແລະ ນຳສະເໜີລັດຖະບານ ຮັບຮອງ.

**ມາດຕາ 6** ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງໃນການຈັດຕັ້ງປະຕິບັດ, ເຜີຍແຜ່, ແນະນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 7** ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນ ທຸກຂັ້ນຈົ່ງ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ບັນດາດຳລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆກ່ອນໜ້ານີ້ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 357/ລບ

ນະຄອນຫຼວງວຽງຈັນ, ວັນທີ 09/10/2019

# ດຳລັດ
## ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍສິນທິສັນຍາ ແລະ ສັນຍາສາກົນ ສະບັບເລກທີ 05/ສພຊ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ສະບັບເລກທີ 46/ສພຊ, ລົງວັນທີ 18 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2007/ ຜທ.ຣມສ-ອປອ.02 ລົງວັນທີ 06 ກັນຍາ 2019.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ກົນໄກກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້

ການຊ່ວຍເຫຼືອທາງການເພື່ອການພັດທະນາ ຈາກຄູ່ຮ່ວມພັດທະນາໃຫ້ແກ່ລັດຖະບານ ແຫ່ງ ສປປ ລາວ ໃຫ້ມີລັກສະນະລວມສູນ, ກະທັດຮັດ, ໂປ່ງໃສ ເພື່ອຮັບປະກັນ ເຮັດໃຫ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ຖືກນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດເປົ້າໝາຍບູລິມະສິດ ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງສຸດ, ແນໃສ່ບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການພັດທະນາທີ່ຍືນຍົງ ແລະ ສີຂຽວ ແລະ ສອດຄ່ອງກັບເປົ້າໝາຍການພັດທະນາຂອງສາກົນ.

**ມາດຕາ 2 ການຊ່ວຍເຫຼືອທາງການເພື່ອການພັດທະນາ**

ການຊ່ວຍເຫຼືອທາງການເພື່ອການພັດທະນາ ໂດຍຂຽນຫຍໍ້ວ່າ "ຊກພ" ແມ່ນການຊ່ວຍເຫຼືອທາງດ້ານເຕັກນິກ-ວິຊາການ ແລະ ດ້ານການເງິນ ລວມທັງວັດຖຸພັນ ຊຶ່ງປະກອບມີ ການຊ່ວຍເຫຼືອລ້າ ແລະ ການກູ້ຢືມໃນເງື່ອນໄຂຜ່ອນຜັນ ທີ່ ສປປ ລາວ ໄດ້ຮັບຈາກຄູ່ຮ່ວມພັດທະນາຢ່າງເປັນທາງການ ເພື່ອການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ເອກະສານຍຸດທະສາດການຮ່ວມມືກັບຕ່າງປະເທດ** ໝາຍເຖິງ ເອກະສານທີ່ກຳນົດຂອບ ລວມຂອງການຮ່ວມມືກັບຕ່າງປະເທດເປັນແຕ່ລະໄລຍະ ເຊັ່ນ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຊຶ່ງກວມເອົາຫຼາຍຂະແໜງການ ຫຼື ຂະແໜງການສະເພາະໃດໜຶ່ງ ທີ່ເປັນບູລິມະສິດຂອງລັດຖະບານ;

**2. ຄູ່ຮ່ວມພັດທະນາ** ໝາຍເຖິງ ລັດຖະບານຕ່າງປະເທດ, ອົງການຈັດຕັ້ງຂອງລັດຖະບານ ຕ່າງປະເທດ ທີ່ໄດ້ຮັບການມອບສິດ ແລະ ອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ-ວິຊາການ ແລະ ດ້ານການເງິນ, ວັດຖຸພັນ ແລະ ອຸປະກອນຕ່າງໆ ແກ່ ສປປ ລາວ;

**3. ຫຼັກການລວມສູນຜ່ານປະຕູດຽວ** ໝາຍເຖິງ ທຸກຮູບແບບ ຊກພ ຕໍ່ ສປປ ລາວ ຕ້ອງປະຕິ ບັດຕາມຫຼັກການລວມສູນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ທີ່ມີອົງການມະຫາພາກເຮັດໜ້າທີ່ໃນການຄຸ້ມຄອງ, ປະສານງານ, ຂຶ້ນແຜນບູລິມະສິດ, ກຳນົດແຜນຄວາມຕ້ອງການ, ຕິດຕາມ ແລະ ປະເມີນຜົນ;

**4. ອົງການມະຫາພາກ** ໝາຍເຖິງ ບັນດາກະຊວງ ແລະ ຂະແໜງການ ເສດຖະກິດ-ສັງຄົມ ຂັ້ນສູນກາງ ທີ່ເຮັດວຽກຄຸ້ມຄອງບໍລິຫານໃນຂອບມະຫາພາກ ຊຶ່ງປະກອບມີກະຊວງຫຼັກຄື: ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງອື່ນໆ ທີ່ກ່ຽວຂ້ອງ;

**5. ອົງການຈັດຕັ້ງສາກົນ** ໝາຍເຖິງ ອົງການຈັດຕັ້ງລະຫວ່າງລັດຖະບານ;

**6. *ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ*** ໝາຍເຖິງ ສຳນັກງານຜູ້ຕາງໜ້າການທູດ, ສຳນັກງານຜູ້ຕາງໜ້າກົງສຸນ ແລະ ສຳນັກງານຜູ້ຕາງໜ້າຖາວອນປະຈຳອົງການຈັດຕັ້ງສາກົນ

ແຫ່ງ ສປປ ລາວ ຢູ່ຕ່າງປະເທດ;

**7. ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ປະຈຳຢູ່ ສປປ ລາວ** ໝາຍເຖິງ ສຳນັກງານຜູ້ຕາງໜ້າການທູດ ແລະ ສຳນັກງານຜູ້ຕາງໜ້າກົງສຸນ ປະຈຳຢູ່ ສປປ ລາວ;

**8. ຄະນະຊີ້ນຳ ແລະ ຄຸ້ມຄອງ ແຜນງານ ຫຼື ໂຄງການ** ໝາຍເຖິງ ຄະນະທີ່ປະກອບດ້ວຍຜູ້ຕາງໜ້າຈາກເຈົ້າຂອງແຜນງານ ຫຼື ໂຄງການ, ອົງການມະຫາພາກ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຊຶ່ງມີພາລະບົດບາດໂດຍກົງໃນການຊີ້ນຳ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ; ໃນກໍລະນີມີຄວາມຈຳເປັນ ອາດມີຜູ້ຕາງໜ້າຈາກຜູ້ໃຫ້ທຶນເຂົ້າຮ່ວມນຳ ບົນພື້ນຖານການຕົກ ລົງເຫັນດີຂອງຄະນະຊີ້ນຳ ແລະ ຄຸ້ມຄອງ;

**9. ແຜນງານ ຫຼື ໂຄງການທີ່ກວມເອົາຫຼາຍຂະແໜງການ** ໝາຍເຖິງ ແຜນງານ ຫຼື ໂຄງການທີ່ຈັດຕັ້ງປະຕິບັດ ໂດຍຫຼາຍຂະແໜງການ ຊຶ່ງຕ້ອງມີຂະແໜງການໃດໜຶ່ງທີ່ເປັນຫຼັກ, ມີບົດບາດໃນການຄຸ້ມຄອງ ແລະ ປະສານງານລວມ, ສ່ວນຂະແໜງການອື່ນ ເປັນຜູ້ຈັດຕັ້ງປະຕິບັດໃນແຕ່ລະກິດຈະກຳທີ່ຂຶ້ນກັບຂະແໜງການຕົນ;

**10. ທຶນສົມທົບຂອງລັດຖະບານ** ໝາຍເຖິງ ການປະກອບສ່ວນຂອງລັດຖະບານ ແລະ ປະຊາ ຊົນຂອງ ສປປ ລາວ ສົມທົບເປັນວັດຖຸພັນ ຫຼື ເປັນເງິນສົດ ເພື່ອກະກຽມ ແລະ ຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊຶ່ງຂະແໜງການທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການເປັນຜູ້ດຳເນີນຂັ້ນຕອນການຂຶ້ນແຜນງົບປະມານ ເພື່ອສະເໜີລັດຖະບານພິຈາລະນາ ແລະ ຂໍການຮັບຮອງຈາກສະພາແຫ່ງຊາດ;

**11. ການຕິດຕາມແຜນງານ ຫຼື ໂຄງການ** ໝາຍເຖິງ ການຕິດຕາມກິດຈະກຳປົກກະຕິ ໃນແຕ່ລະໄລຍະ ຢູ່ໃນການຄຸ້ມຄອງແຕ່ລະຂັ້ນ ເພື່ອເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບສະພາບໃນການຈັດຕັ້ງປະຕິບັດຂອງ ແຜນງານ ຫຼື ໂຄງການ, ການຈັດປະເພດ ແລະ ວິເຄາະຂໍ້ມູນ, ການໃຫ້ຄຳແນະນຳຢ່າງທັນເວລາໃນການສ້າງແຜນ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຈຸດປະສົງ, ມີຄວາມຄືບໜ້າ ແລະ ໄດ້ມາດຕະຖານ ຂອງໜ້າວຽກ ຂອງແຜນງານ ຫຼື ໂຄງການ;

**12. ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີຊື່ຫຍໍ້ວ່າ "ອສບລ"** ໝາຍເຖິງ ອົງການ ຈັດຕັ້ງສັງຄົມຂອງຕ່າງປະເທດ ທີ່ມີຖານະນິຕິບຸກຄົນ ຊຶ່ງມີເປົ້າໝາຍຊ່ວຍເຫຼືອໃນດ້ານການພັດທະນາ ແລະ ດ້ານມະນຸດສະທຳ ໂດຍບໍ່ສະແຫວງຫາຜົນກຳໄລ;

**13. ສະມາຄົມ** ມີຊື່ເອີ້ນຕ່າງກັນຄື: ສະຫະສະມາຄົມ, ສະຫະພັນ, ສະໂມສອນ ຫຼື ຊື່ເອີ້ນອື່ນ ຕໍ່ໄປນີ້ເອີ້ນລວມວ່າ ສະມາຄົມ ຊຶ່ງແມ່ນການຈັດຕັ້ງສັງຄົມທີ່ມີສະມາຊິກ (ຍົກເວັ້ນກຸ່ມຜະລິດທຸລະກິດທີ່ສະແຫວງຫາຜົນກຳໄລ);

**14. ມູນນິທິ** ໝາຍເຖິງ ການຈັດຕັ້ງສັງຄົມທີ່ມີຖານະນິຕິບຸກຄົນ, ມີທຶນ, ຊັບສິນສະເພາະ ເພື່ອສາທາລະນະປະໂຫຍດ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາກາຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ແລະ ອື່ນໆ ໂດຍບໍ່ຫວັງຜົນກຳໄລ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ຊກພ**

ລັດ ມີນະໂຍບາຍຄຸ້ມຄອງ ແລະ ນຳໃຊ້ ຊກພ ເພື່ອປະກອບສ່ວນເປັນແຫຼ່ງທຶນ ທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

ລັດ ມີນະໂຍບາຍກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ຊກພ ດ້ວຍການວາງນະໂຍບາຍ, ລະບຽບການ ແລະ ປະກອບສ່ວນຊັບພະຍາກອນມະນຸດ ແລະ ງົບປະມານ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ແລະ ໂປ່ງໃສ.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ ຊກພ**

ການຄຸ້ມຄອງ ແລະ ການນຳໃຊ້ ຊກພ ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;

2. ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍຜ່ານປະຕູດຽວ ຄື: ຜ່ານກະຊວງແຜນການ ແລະ ການລົງທຶນ ເພື່ອແຈກຢາຍໃຫ້ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການໃນຂັ້ນຕອນຕໍ່ໄປ;

3. ສອດຄ່ອງກັບຍຸດທະສາດ ການຄຸ້ມຄອງ ແລະ ລະດົມທຶນ ຊກພ ແລະ ຂອບການຮ່ວມມືກັບຄູ່ຮ່ວມພັດທະນາ;

4. ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ;

5. ນຳໃຊ້ ຊກພ ໃຫ້ຖືກເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນສູງ;

6. ການຄຸ້ມຄອງການເງິນຂອງ ແຜນງານ ຫຼື ໂຄງການ ຕ້ອງສອດຄ່ອງ ກັບກົດໝາຍ ແລະລະບຽບການຂອງ ສປປ ລາວ ຫຼື ການຕົກລົງຂອງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ;

7. ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

8. ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຄະນະກຳມາທິການຮ່ວມມືສອງຝ່າຍ ທີ່ພົວພັນກັບການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊກພ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ປະສົບການດ້ານການລະດົມຂົນຂວາຍ ແລະເຕັກໂນໂລຊີ ເພື່ອຄຸ້ມຄອງ ແລະ ນຳໃຊ້ ຊກພ.

## ໝວດທີ 2
## ປະເພດການຊ່ວຍເຫຼືອທາງການເພື່ອການພັດທະນາ

### ມາດຕາ 8 ປະເພດຂອງການຊ່ວຍເຫຼືອທາງການເພື່ອການພັດທະນາ

ຊກພ ປະກອບມີ ດັ່ງນີ້:

1. ການຊ່ວຍເຫຼືອລ້າ;
2. ການກູ້ຢືມໃນເງື່ອນໄຂຜ່ອນຜັນ.

### ມາດຕາ 9 ການຊ່ວຍເຫຼືອລ້າ

ການຊ່ວຍເຫຼືອລ້າ ແມ່ນການຊ່ວຍເຫຼືອທີ່ບໍ່ໄດ້ໃຊ້ແທນຄືນ ຊຶ່ງມີໃນຮູບແບບການຊ່ວຍເຫຼືອລ້າທີ່ເປັນແຜນງານ ຫຼື ໂຄງການ, ການຊ່ວຍເຫຼືອລ້າທາງດ້ານວິຊາການ, ການຊ່ວຍເຫຼືອລ້າທາງດ້ານການເງິນ, ການຊ່ວຍເຫຼືອລ້າທີ່ເປັນໂຄງການ ເພື່ອຊ່ວຍກະກຽມແຜນງານ ຫຼື ໂຄງການ, ການຊ່ວຍເຫຼືອລ້າທີ່ຕິດພັນກັບການກູ້ຢືມໃນເງື່ອນໄຂຜ່ອນຜັນ, ການຊ່ວຍເຫຼືອລ້າທີ່ເປັນວັດຖຸ ແລະ ການຊ່ວຍເຫຼືອ ອື່ນໆທີ່ເປັນແຜນງານ ຫຼື ໂຄງການ ທີ່ໄດ້ຮັບໃນເວລາການນຳຂັ້ນສູງໄປເຄື່ອນໄຫວຢູ່ຕ່າງປະເທດ ແລະ ການນຳຂັ້ນສູງຕ່າງປະເທດມາຢ້ຽມຢາມ ສປປ ລາວ.

### ມາດຕາ 10 ການກູ້ຢືມໃນເງື່ອນໄຂຜ່ອນຜັນ

ການກູ້ຢືມໃນເງື່ອນໄຂຜ່ອນຜັນ ແມ່ນການກູ້ຢືມ ຫຼື ການສະໜອງທຶນ ທີ່ມີເງື່ອນໄຂການກູ້ຢືມຕໍ່າກວ່າ ການກູ້ຢືມທຸລະກິດ ເປັນຕົ້ນ ດອກເບ້ຍຕໍ່າ, ໄລຍະຊຳລະຍາວ ແລະ ໄລຍະປອດໜີ້ຍາວ ມີແຜນໃຊ້ເຂົ້າໃນແຜນງານ ຫຼື ໂຄງການ ກໍ່ສ້າງໂຄງລ່າງພື້ນຖານ, ວຽກງານພັດທະນາຢູ່ຂົງເຂດສັງຄົມ, ການລຶບລ້າງຄວາມທຸກຍາກ ແລະ ຂົງເຂດອື່ນ ທີ່ບໍ່ສ້າງລາຍຮັບໂດຍກົງ ແລະ ບໍ່ມີຜົນຕອບແທນທາງການເງິນສູງ.

### ມາດຕາ 11 ການລະດົມຂົນຂວາຍ ຊກພ

ການລະດົມຂົນຂວາຍ ຊກພ ແມ່ນຕ້ອງອີງໃສ່ຍຸດທະສາດ, ຂອບການຮ່ວມມື ລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ ທີ່ສ້າງຂຶ້ນບົນພື້ນຖານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ ໂດຍການລະດົມຂົນຂວາຍ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ແລະ ຂະບວນການໂຕະມົນ.

## ໝວດທີ 3
## ການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອລ້າ

### ມາດຕາ 12 ການຄຸ້ມຄອງການຊ່ວຍເຫຼືອລ້າ

ລັດ ຄຸ້ມຄອງວຽກງານຊ່ວຍເຫຼືອລ້າຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບ ກັບກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງ, ອົງການລັດທຽບເທົ່າກະຊວງ

ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 13 ເປົ້າໝາຍການນຳໃຊ້ການຊ່ວຍເຫຼືອລ້າ**

ເປົ້າໝາຍການນຳໃຊ້ການຊ່ວຍເຫຼືອລ້າ ແມ່ນຕ້ອງນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນການ, ແຜນງານ ຫຼື ໂຄງການບູລິມະສິດ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ.

**ມາດຕາ 14 ການຮັບຮອງເອົາຍຸດທະສາດການຊ່ວຍເຫຼືອລ້າ**

ລັດຖະບານ ຮັບຮອງເອົາ ຍຸດທະສາດການຮ່ວມມືໄລຍະຍາວ ທີ່ກວມເອົາຫຼາຍຂະແໜງການ, ລະດັບຊາດ ແລະ ລະດັບພາກພື້ນ ທີ່ເປັນການຊ່ວຍເຫຼືອລ້າ ຕາມການສະເໜີຂອງກະຊວງການຕ່າງປະເທດ.

**ມາດຕາ 15 ການອະນຸມັດຮັບເອົາແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ**

ການອະນຸມັດຮັບເອົາ ແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ປະຕິບັດ ດັ່ງນີ້:

1. ລັດຖະບານ ອະນຸມັດການຮັບເອົາການຊ່ວຍເຫຼືອລ້າ ສຳລັບແຜນງານ ຫຼື ໂຄງການ ທີ່ກວມເອົາຫຼາຍຂະແໜງການ, ລະດັບຊາດ ແລະ ລະດັບພາກພື້ນ ຕາມການສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ;

2. ກະຊວງແຜນການ ແລະ ການລົງທຶນ ອະນຸມັດຮັບເອົາທຸກການຊ່ວຍເຫຼືອລ້າໃນລະດັບແຜນງານ ຫຼື ໂຄງການ ຕາມການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ;

3. ກະຊວງການຕ່າງປະເທດ ອະນຸມັດການຮັບເອົາການຊ່ວຍເຫຼືອລ້າ ຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ, ສະໂມສອນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງຕ່າງປະເທດ ລວມທັງການຊ່ວຍເຫຼືອຂອງຕ່າງປະເທດ ໃຫ້ແກ່ອົງການຈັດຕັ້ງທາງສັງຄົມຂອງ ສປປ ລາວ ບົນພື້ນຖານການເຫັນດີ ຂອງກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ແລະ ກະຊວງພາຍໃນ ໂດຍອີງຕາມດຳລັດ 013/ນຍ ລົງວັນທີ 08 ມັງກອນ 2010 ວ່າດ້ວຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ດຳລັດ 238/ນຍ ລົງວັນທີ 11 ສິງຫາ 2017 ວ່າດ້ວຍສະມາຄົມ ແລະ ດຳລັດ 149/ນຍ ລົງວັນທີ 19 ພຶດສະພາ 2011 ວ່າດ້ວຍມູນນິທິ.

**ມາດຕາ 16 ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ**

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນ ຫຼື ໂຄງການປະຕິບັດ ດັ່ງນີ້:

1. ແຕ່ງຕັ້ງຄະນະຊີ້ນຳ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຢູ່ຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ຊຶ່ງປະກອບມີ ກົມ ຫຼື ພະແນກ

ການ ທີ່ເຮັດໜ້າທີ່ຫຼັກໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ເພື່ອຮັບປະກັນການນໍາໃຊ້ທຶນໃຫ້ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ, ສາມາດກວດສອບໄດ້, ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ;

2. ແຕ່ງຕັ້ງໜ່ວຍງານຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ເພື່ອເຮັດໜ້າທີ່ໃນການກະກຽມອົງປະກອບຕ່າງໆ ໃຫ້ແກ່ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ:

- ສ້າງແຜນດໍາເນີນງານປະຈໍາປີ ຊຶ່ງປະກອບດ້ວຍບັນດາໜ້າວຽກ, ກິດຈະກໍາທີ່ຈະຈັດຕັ້ງປະຕິບັດ ສໍາລັບແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ ທີ່ຕົນຮັບຜິດຊອບ;
- ຂຶ້ນແຜນງົບປະມານລວມ ແລະ ແຜນການເບີກຖອນທຶນຊ່ວຍເຫຼືອລ້າ ປະຈໍາປີ ລວມທັງທຶນສົມທົບຈາກລັດຖະບານ ແລະ ງົບປະມານ ສໍາລັບການລົງຊຸກຍູ້, ຕິດຕາມ ແລະ ປະເມີນຜົນແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ແລ້ວສະເໜີຕໍ່ການຈັດຕັ້ງຂັ້ນເທິງຖັດຕົນ ເພື່ອຢັ້ງຢືນຕາມລະບຽບການ ກ່ອນສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນກວດກາຄວາມຖືກຕ້ອງ ເພື່ອສັງລວມເຂົ້າແຜນ ແລ້ວສະເໜີຂໍອະນຸມັດຈາກລັດຖະບານ ແລະ ສະພາແຫ່ງຊາດ ຮັບຮອງ;
- ກະກຽມຂອບໜ້າວຽກລະອຽດດ້ານບຸກຄະລາກອນ ແລະ ຕອບສະໜອງໃຫ້ພຽງພໍ ເພື່ອຮອງຮັບການຈັດຕັ້ງປະຕິບັດກິດຈະກໍາແຜນງານ ຫຼື ໂຄງການ;
- ສະຫຼຸບລາຍງານຄວາມຄືບໜ້າການຈັດຕັ້ງປະບັດກິດຈະກໍາ, ການເບີກຖອນງົບປະມານລວມທັງທຶນສົມທົບ (ຖ້າມີ) ແລະ ບັນຫາ, ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ຕາມພາລະບົດບາດຂອງຕົນ.

**ມາດຕາ 17 ການຕິດຕາມ ແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ**

ການຕິດຕາມ ແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າມີ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການສ້າງຄູ່ມື ແລະ ກໍານົດການຄຸ້ມຄອງລະບົບການຕິດຕາມ ແລະ ປະເມີນຜົນໃຫ້ມີປະສິດທິຜົນ ເພື່ອເປັນບ່ອນອີງໃນການປະຕິບັດຕົວຈິງຂອງແຜນງານ ແລະ ໂຄງການຊ່ວຍເຫຼືອລ້າໃນລະດັບມະຫາພາກ, ຫຼັງຈາກນັ້ນຈັດຕັ້ງເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ;

2. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ຕ້ອງນໍາໃຊ້ລະບົບ, ແບບພິມການຕິດຕາມ ແລະ ປະເມີນຜົນທີ່ກະຊວງແຜນການ ແລະ ການລົງທຶນ ກໍານົດໄວ້ ເພື່ອໃຫ້ມີຄວາມເປັນເອກະພາບກັນ ລະຫວ່າງ ລັດຖະບານ ສປປ ລາວ ແລະ ຄູ່ຮ່ວມພັດທະນາ;

3. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ຕ້ອງປະຕິບັດ ຕາມລະບຽບການປະເມີນຜົນໂຄງການລົງທຶນຂອງລັດ;

4. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຄູ່ຮ່ວມພັດທະນາ ດຳເນີນການທົບທວນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ເພື່ອຕິດຕາມ ແລະ ປະເມີນຄືນແຜນງານ ຫຼື ໂຄງການ ກ່ຽວກັບຄວາມຄືບໜ້າ ຫຼື ບັນຫາ, ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ;

5. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ ຕິດຕາມ, ຊຸກຍູ້ໃຫ້ຄຳແນະນຳ ແລະ ອຳນວຍຄວາມສະດວກ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ບັນລຸຜົນສຳເລັດ ແລະ ມີປະສິດທິຜົນ.

**ມາດຕາ 18 ການປະເມີນຜົນແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ**

ການປະເມີນຜົນແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ ມີ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບຄູ່ຮ່ວມພັດທະນາ ແລະ ແຈ້ງໃຫ້ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ເພື່ອດຳເນີນການປະເມີນເບື້ອງຕົ້ນ ສຳລັບເອກະສານແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ;

2. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບຄູ່ຮ່ວມພັດທະນາ ແລະ ແຈ້ງໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ເປັນຜູ້ຮັບຜິດຊອບໃນການປະເມີນຜົນໄລຍະກາງຂອງການຈັດຕັ້ງປະຕິບັດ; ຕ້ອງດຳເນີນໂດຍທັນທີໃນໄລຍະກາງຂອງແຜນງານ ຫຼື ໂຄງການ ເພື່ອພິຈາລະນາສະຖານະພາບຂອງການຈັດຕັ້ງປະຕິບັດ ເປັນໄປຕາມກຳນົດເວລາ ຂອງແຜນງານ ຫຼື ໂຄງການ ແລະ ເພື່ອດັດປັບແຜນກິດຈະກຳ ແລະ ແຜນງົບປະມານຂອງແຜນງານ ຫຼື ໂຄງການ;

3. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບຄູ່ຮ່ວມພັດທະນາ ແລະ ແຈ້ງໃຫ້ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ດຳເນີນການປະເມີນຜົນໄລຍະສິ້ນສຸດ ແຜນງານ ຫຼື ໂຄງການ; ຕ້ອງດຳເນີນໂດຍທັນທີ ພາຍຫຼັງສຳເລັດແຜນງານ ຫຼື ໂຄງການ ເພື່ອພິຈາລະນາການຈັດຕັ້ງປະຕິບັດກິດຈະກຳທັງໝົດ ແລະ ສະໜອງຂໍ້ມູນພື້ນຖານ ສຳລັບການລາຍງານກ່ຽວກັບຜົນສຳເລັດຂອງແຜນງານ ຫຼື ໂຄງການ;

4. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການປະສານສົມທົບກັບຄູ່ຮ່ວມພັດທະນາ ແລະ ແຈ້ງໃຫ້ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ດຳເນີນການປະເມີນຜົນກະທົບ ຫຼັງຈາກແຜນງານ ຫຼື ໂຄງການ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ນຳໃຊ້ ເພື່ອພິຈາລະນາດ້ານປະສິດທິຜົນ, ຄວາມຍືນຍົງ ແລະ ຜົນກະທົບ ໂດຍການສົມທຽບກັບຈຸດປະສົງເບື້ອງຕົ້ນຂອງແຜນງານ ຫຼື ໂຄງການ.

**ມາດຕາ 19 ການສິ້ນສຸດ ແລະ ສືບຕໍ່ ແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ**

ກ່ອນແຜນງານ ຫຼື ໂຄງການຈະສິ້ນສຸດລົງ ຫົກເດືອນ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຕ້ອງສະຫຼຸບຕີລາຄາຜົນຂອງການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການໄລຍະຜ່ານມາ ແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງການຕ່າງປະເທດ;

ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ ແລະ ກະຊວງການເງິນ ຈັດກອງປະຊຸມພິຈາລະນາ ເພື່ອມີທິດຊີ້ນໍາ ທີ່ເປັນເອກະພາບຕໍ່ການສະຫຼຸບຕີລາຄາດັ່ງກ່າວ. ຫຼັງຈາກນັ້ນ, ຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ຂອງແຜນງານ ຫຼື ໂຄງການ ແລະ ຄູ່ຮ່ວມພັດທະນາ;

ພາຍຫຼັງແຜນງານ ຫຼື ໂຄງການສິ້ນສຸດລົງ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຕ້ອງສະຫຼຸບ ແລະ ມອບບັນຊີຊັບສິນຂອງແຜນງານ ຫຼື ໂຄງການ ໃຫ້ແກ່ກະຊວງການເງິນ ຕາມກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ແຈ້ງໃຫ້ກະຊວງແຜນການ ແລະ ການລົງທຶນຊາບ; ກະຊວງການເງິນຈະແບ່ງປັນ ຕາມການຕົກລົງຂອງ ລັດຖະບານ;

ໃນກໍລະນີສືບຕໍ່ແຜນງານ ຫຼື ໂຄງການ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຕ້ອງສະຫຼຸບຕີລາຄາຜົນຂອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ໄລຍະຜ່ານມາ ແລະ ໃຫ້ເຫດຜົນໃນການສືບຕໍ່ໂຄງການ ຫຼື ແຜນງານ ແລ້ວສະເໜີຂໍອະນຸມັດມາຍັງກະຊວງແຜນການ ແລະ ການລົງທຶນ.

**ມາດຕາ 20 ການລາຍງານການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ**

ການລາຍງານການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ ມີ ດັ່ງນີ້:

1. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ແລະ ຄູ່ຮ່ວມພັດທະນາ ຕ້ອງລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດກິດຈະກໍາ, ການເບີກຈ່າຍຕົວຈິງ ແລະ ແຜນການເບີກຈ່າຍງົບປະມານ ລວມທັງທຶນສົມທົບສໍາລັບແຜນງານ ຫຼື ໂຄງການ ຊ່ວຍເຫຼືອລ້າ ທີ່ນອນໃນກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອໃຫ້ສາມາດຕິດຕາມ ແລະ ສັງລວມຄວາມຄືບໜ້າ ລວມທັງສະເໜີການຈັດສັນທຶນສົມທົບສໍາລັບແຜນງານ ຫຼື ໂຄງການກ່ອນວັນທີ 15 ມິຖຸນາ ຂອງທຸກໆປີ;

2. ຄະນະຊີ້ນໍາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຈະຕ້ອງລາຍງານຜົນ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການໃຫ້ການຈັດຕັ້ງຖັດຕົນຂຶ້ນໄປເປັນປະຈໍາແຕ່ລະໄຕມາດ, ປະຈໍາຫົກເດືອນ ແລະ ປະຈໍາປີ ເພື່ອຊາບ ແລະ ມີທິດຊີ້ນໍາ;

3. ໜ່ວຍງານຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ທີ່ເປັນການຊ່ວຍເຫຼືອລ້າ ຫຼື ການກູ້ຢືມໃນເງື່ອນໄຂຜ່ອນຜັນ ຕ້ອງລາຍງານຄວາມຄືບໜ້າ, ແຜນການເບີກຈ່າຍ, ການເບີກຈ່າຍຕົວຈິງ ແລະ ຜົນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຂອງຕົນ ໃຫ້ຄະນະຊີ້ນໍາໂຄງການຊາບຢ່າງເປັນປະຈໍາແຕ່ລະ

ເດືອນ, ປະຈຳແຕ່ລະໄຕມາດ, ປະຈຳຫົກເດືອນ ແລະ ປະຈຳປີ;

4. ສຳລັບໂຄງການທີ່ໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (ອສບລ) ແລະ ສະມາຄົມ, ມູນນິທິ ໃຫ້ປະຕິບັດຕາມ ດຳລັດ 013/ນຍ ລົງວັນທີ 08 ມັງກອນ 2010, ດຳລັດ 238/ນຍ ລົງວັນທີ 11 ສິງຫາ 2017 ແລະ ດຳລັດ149/ນຍ ລົງວັນທີ 19 ພຶດສະພາ 2011.

## ໝວດທີ 4
## ການຄຸ້ມຄອງ ແລະ ນຳໃຊ້ການກູ້ຢືມໃນເງື່ອນໄຂຜ່ອນຜັນ

### ມາດຕາ 21 ການຄຸ້ມຄອງການກູ້ຢືມໃນເງື່ອນໄຂຜ່ອນຜັນ

ລັດ ຄຸ້ມຄອງວຽກງານການກູ້ຢືມໃນເງື່ອນໄຂຜ່ອນຜັນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຕ້ອງຈັດຕັ້ງປະຕິບັດຕາມກົດໝາຍຄຸ້ມຄອງໜີ້ສິນສາທາລະນະ.

### ມາດຕາ 22 ເປົ້າໝາຍການນຳໃຊ້ການກູ້ຢືມໃນເງື່ອນໄຂຜ່ອນຜັນ

ທຶນກູ້ຢືມໃນເງື່ອນໄຂຜ່ອນຜັນ ມີເປົ້າໝາຍໃຫ້ນຳໃຊ້ເຂົ້າໃນແຜນງານ ຫຼື ໂຄງການກໍ່ສ້າງໂຄງລ່າງພື້ນຖານ, ວຽກງານພັດທະນາຢູ່ຂົງເຂດສັງຄົມ, ການລຶບລ້າງຄວາມທຸກຍາກ ແລະ ຂົງເຂດອື່ນ ທີ່ບໍ່ສ້າງລາຍຮັບໂດຍກົງ ແລະ ບໍ່ມີຜົນຕອບແທນທາງການເງິນສູງ;

ສຳລັບເງິນກູ້ຢືມໃນເງື່ອນໄຂຜ່ອນຜັນ ເພື່ອດຸ່ນດ່ຽງງົບປະມານ ຕ້ອງອີງຕາມແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ.

### ມາດຕາ 23 ແຜນງານ ຫຼື ໂຄງການ ທີ່ນຳໃຊ້ເງິນກູ້ຢືມໃນເງື່ອນໄຂຜ່ອນຜັນ

ແຜນງານ ຫຼື ໂຄງການ ທີ່ນຳໃຊ້ເງິນກູ້ຢືມໃນເງື່ອນໄຂຜ່ອນຜັນ ຕ້ອງປະກອບມີເງື່ອນໄຂ ດັ່ງນີ້:

1. ນອນຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ ສະພາແຫ່ງຊາດ ໄດ້ຮັບຮອງ;

2. ມີບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ແລະ ໄດ້ຮັບການຕົກລົງເຫັນດີຂອງລັດຖະບານ ໂດຍຜ່ານ ກະຊວງແຜນການ ແລະ ການລົງທຶນ, ສຳລັບແຜນງານ ຫຼື ໂຄງການ ທີ່ມີມູນຄ່າຫຼາຍກວ່າສີ່ຮ້ອຍຕື້ກີບ ຂຶ້ນໄປ ຕ້ອງໄດ້ຖືກຮັບຮອງໂດຍສະພາແຫ່ງຊາດ;

3. ນອນຢູ່ໃນແຜນກູ້ຢືມປະຈຳປີ ແລະ ແຜນກູ້ຢືມໄລຍະກາງ ທີ່ກະຊວງການເງິນເປັນຜູ້ສັງລວມ ແລະ ລັດຖະບານ ຕົກລົງເຫັນດີ;

4. ການກູ້ຢືມເງື່ອນໃນໄຂຜ່ອນຜັນ ເພື່ອດຸ່ນງົບປະມານ ຕ້ອງນອນຢູ່ໃນແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດ ຮັບຮອງ.

**ມາດຕາ 24 ການຮັບຮອງແຜນງານ ຫຼື ໂຄງການ ເງິນກູ້ໃນເງື່ອນໄຂຜ່ອນຜັນ**

ການຮັບຮອງແຜນງານ ຫຼື ໂຄງການ ເງິນກູ້ໃນເງື່ອນໄຂຜ່ອນຜັນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງບົດວິພາກເສດຖະກິດ-ເຕັກນິກຂອງແຜນງານ ຫຼື ໂຄງການ ແລ້ວສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງຮັບຮອງ;

2. ກະຊວງແຜນການ ແລະ ການລົງທຶນ ດໍາເນີນການປະເມີນບົດວິພາກເສດຖະກິດ ຂອງແຜນງານ ຫຼື ໂຄງການ ເພື່ອເອົາເຂົ້າໃນແຜນການລົງທຶນ;

3. ກະຊວງການເງິນ ແຕ່ງຕັ້ງຄະນະຄົ້ນຄວ້າສະເພາະ ປະກອບມີພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ແລະ ຢັ້ງຢືນຄວາມຈໍາເປັນ ສໍາລັບການກູ້ຢືມເງິນ ເພື່ອຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ;

4. ກະຊວງການເງິນຄົ້ນຄວ້າແຫຼ່ງທຶນ, ປະເມີນຜົນກະທົບ ແລະ ຄວາມສ່ຽງ ຕໍ່ຖານະໜີ້ສິນສາທາລະນະ, ຢັ້ງຢືນຄວາມສາມາດໃນການກູ້ຢືມ, ສັງລວມແຜນງານ ແລະ ໂຄງການ ເຂົ້າໃນແຜນການກູ້ຢືມ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາຕົກລົງ.

**ມາດຕາ 25 ການທາບທາມ ແລະ ເຈລະຈາສັນຍາເງິນກູ້ຢືມໃນເງື່ອນໄຂຜ່ອນຜັນ**

ການທາບທາມ ແລະ ເຈລະຈາສັນຍາເງິນກູ້ຢືມໃນເງື່ອນໄຂຜ່ອນຜັນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ລັດຖະບານ ພິຈາລະນາຕົກລົງ ແຜນການກູ້ຢືມ;

2. ກະຊວງການເງິນ ດໍາເນີນຂັ້ນຕອນ ການທາບທາມທຶນ ໂດຍອີງໃສ່ການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຫຼື ຄູ່ຮ່ວມພັດທະນາ;

3. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໂດຍປະສານສົມທົບກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງກ່ຽວຂ້ອງອື່ນໆ ແຕ່ງຕັ້ງຄະນະຮັບຜິດຊອບກະກຽມແຜນງານ ຫຼື ໂຄງການ ເມື່ອຜູ້ໃຫ້ທຶນເຫັນດີສະໜອງທຶນກູ້ຢືມ, ລາຍງານຜົນການປະເມີນການກະກຽມແຜນງານ ຫຼື ໂຄງການຂັ້ນສຸດທ້າຍ ເຖິງກະຊວງການເງິນ ເພື່ອສະເໜີລັດຖະບານຮັບຮອງ ແລະ ມອບສິດໃຫ້ກະຊວງການເງິນເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມຮ່ວມກັບຄູ່ຮ່ວມພັດທະນາ.

**ມາດຕາ 26 ການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການກູ້ຢືມໃນເງື່ອນໄຂຜ່ອນຜັນ**

ການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການກູ້ຢືມໃນເງື່ອນໄຂຜ່ອນຜັນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ແມ່ນຕ້ອງສອດຄ່ອງກັບຈຸດປະສົງ, ເປົ້າໝາຍ ແລະ ເງື່ອນໄຂຂອງສັນຍາເງິນກູ້ ແລະ ຖືກຕ້ອງຕາມກົດໝາຍ, ລະບຽບການກ່ຽວຂ້ອງຂອງ ສປປ ລາວ. ການຈັດຊື້-ຈັດຈ້າງ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງເປັນຫຼັກ, ເວັ້ນເສຍແຕ່ມີຂໍ້ກໍານົດຕ່າງຫາກໃນສັນຍາເງິນກູ້ ແມ່ນໃຫ້ປະຕິບັດຕາມລະບຽບຂອງຄູ່ຮ່ວມພັດທະນາ;

2. ການຈັດຕັ້ງປະຕິບັດດ້ານການເງິນຂອງແຜນງານ ຫຼື ໂຄງການ ແມ່ນໃຫ້ປະຕິບັດສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງຂອງກະຊວງການເງິນ ເຊັ່ນ ກົດໝາຍງົບປະມານແຫ່ງລັດ, ກົດໝາຍຄຸ້ມຄອງຊັບສິນຂອງລັດ, ກົດໝາຍສ່ວຍສາອາກອນ, ລະບຽບການຄຸ້ມຄອງການເງິນ ສໍາລັບການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ອື່ນໆ;

3. ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຕ້ອງຂຶ້ນແຜນການເບີກຖອນເງິນປະຈໍາປີໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມເຂົ້າໃນແຜນງົບປະມານ ລາຍງານສະພາແຫ່ງຊາດຮັບຮອງ; ຕ້ອງປະເມີນຜົນການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການເປັນແຕ່ລະໄລຍະ, ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ແລະ ການນໍາໃຊ້ທຶນໃຫ້ກະຊວງການເງິນເປັນປະຈໍາເດືອນ, ປະຈໍາໄຕມາດ, ປະຈໍາຫົກເດືອນ ແລະ ປະຈໍາປີ;

4. ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການແມ່ນຕ້ອງດໍາເນີນເປັນປະຈໍາ ໂດຍການມີສ່ວນຮ່ວມຂອງກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ຮັບປະກັນໃຫ້ການນໍາໃຊ້ເງິນກູ້ ມີປະສິທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມເປົ້າໝາຍ;

5. ກ່ອນສິ້ນສຸດໂຄງການຫົກເດືອນ ກະຊວງການເງິນ ຈະແຕ່ງຕັ້ງຄະນະວິຊາການໄປລົງມືກວດກາສະພາບ ແລະ ຕີລາຄາຊັບສິນ ເພື່ອສັງລວມບັນຊີ ແລະ ສະເໜີລັດຖະບານ ພິຈາລະນາການນໍາໃຊ້ພາຍຫຼັງໂຄງການສິ້ນສຸດ;

6. ພາຍຫຼັງສິ້ນສຸດແຜນງານ ຫຼື ໂຄງການ ກະຊວງການເງິນ ຮ່ວມກັບພາກສ່ວນກ່ຽວຂ້ອງ ປະເມີນຜົນໄດ້ຮັບ ແລະ ຕີລາຄາຄືນ ປະສິດທິຜົນການນໍາໃຊ້ເງິນກູ້ຢືມໃນເງື່ອນໄຂຜ່ອນຜັນຂອງແຜນງານ ຫຼື ໂຄງການ ເພື່ອຖອດຖອນບົດຮຽນ ແລະ ເປັນບ່ອນອີງໃນການພິຈາລະນາເງິນກູ້ ໃນອະນາຄົດ.

## ໝວດທີ 5
## ຄວາມຮັບຜິດຊອບຂອງອົງການລັດກ່ຽວກັບ ຊກພ

### ມາດຕາ 27 ຄວາມຮັບຜິດຊອບຂອງ ລັດຖະບານ

ລັດຖະບານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ກໍານົດທິດທາງ, ນະໂຍບາຍ ແລະ ຍຸດທະສາດໃນການລະດົມ, ຍາດແຍ່ງ ແລະ ຄຸ້ມຄອງ ຊກພ;

2. ພິຈາລະນາ, ຕົກລົງ ແລະ ຮັບຮອງເອົາ:

- ເອກະສານຍຸດທະສາດ, ສັນຍາແມ່ ຫຼື ຂອບການຮ່ວມມືດ້ານການຊ່ວຍເຫຼືອທີ່ກວມລວມ ແລະ ພົວພັນເຖິງນະໂຍບາຍມະຫາພາກ ຕາມການສະເໜີຂອງກະຊວງການຕ່າງປະເທດ ບົນພື້ນຖານ ຄວາມເປັນເອກະພາບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

- ຜົນການປະເມີນຂັ້ນສຸດທ້າຍໃນການກະກຽມແຜນງານ ຫຼື ໂຄງການ ຊກພ ທີ່ເປັນເງິນຊ່ວຍເຫຼືອລ້າ ຕາມການສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ທີ່ເປັນເງິນກູ້ໃນເງື່ອນໄຂຜ່ອນຜັນ ຕາມການສະເໜີຂອງກະຊວງການເງິນ;
- ຜົນການເຈລະຈາສັນຍາການສະໜອງທຶນ ຕາມການລາຍງານຂອງກະຊວງການເງິນ;
- ການເຊັນສັນຍາ, ການດັດແກ້ ຫຼື ລົບລ້າງ ສັນຍາແຜນງານ ຫຼື ໂຄງການ ຊກພ;
- ການສະໜອງທຶນສົມທົບຂອງລັດຖະບານ ເພື່ອປະຕິບັດແຜນງານ ແລະ ໂຄງການ ຊກພ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ງົບປະມານແຫ່ງລັດປະຈຳປີ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ;

3. ອະນຸມັດ ແລະ ຕົກລົງໃຫ້ກະຊວງການເງິນ ຫຼື ຜູ້ທີ່ໄດ້ຮັບມອບສິດ ຕາມການສະເໜີຂອງກະຊວງການເງິນ ເປັນຜູ້ຕາງໜ້າລັດຖະບານ ແຫ່ງ ສປປ ລາວ ເຊັນສັນຍາກູ້ຢືມ;

**ມາດຕາ 28 ຄວາມຮັບຜິດຊອບຂອງກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການໃນການສ້າງເອກະສານຍຸດທະສາດການຊ່ວຍເຫຼືອທາງການເພື່ອການພັດທະນາໃນແຕ່ລະໄລຍະ;

2. ສັງລວມ ແລະ ສ້າງແຜນຄວາມຕ້ອງການ ຊກພ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນແຕ່ລະໄລຍະ ເພື່ອຕອບສະໜອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມເປົ້າໝາຍການພັດທະນາຕາມທິດຍືນຍົງ ແລະ ສີຂຽວ;

3. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍນະໂຍບາຍ ແລະ ທິດທາງຂອງລັດຖະບານຕໍ່ການລະດົມ ຊກພ;

4. ເປັນເຈົ້າການປະສານສົມທົບ ກັບກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ໃນການສ້າງຂອບການຮ່ວມມືໃນແຕ່ລະໄລຍະ ລວມທັງກຳນົດບັນດາແຜນງານ ຫຼື ໂຄງການ ແລະ ພາກສ່ວນຈັດຕັ້ງປະຕິບັດ;

5. ເຊັນສັນຍາຮັບເອົາໂຄງການຊ່ວຍເຫຼືອລ້າ ທີ່ກວມເອົາຫຼາຍຂະແໜງການ;

6. ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກະກຽມ ແລະ ສັງລວມແຜນງານ ຫຼື ໂຄງການ ຊກພ ເພື່ອສະເໜີລັດຖະບານ ຮັບຮອງ;

7. ປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອທົບທວນ ແລະ ຢັ້ງຢືນຄືນບັນຊີແຜນງານ ຫຼື ໂຄງການ ຊກພ;

8. ເປັນເຈົ້າການລາຍງານຜົນການປະເມີນຂັ້ນສຸດທ້າຍ ໃນການກະກຽມແຜນງານ ຫຼື ໂຄງການ ຊກພ ທີ່ເປັນການຊ່ວຍເຫຼືອລ້າ ບົນພື້ນຖານການສະເໜີຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເປັນເຈົ້າຂອງ ແຜນງານ ຫຼື ໂຄງການ ໃຫ້ລັດຖະບານເພື່ອຮັບຮອງ ແລ້ວມອບໃຫ້ກະຊວງແຜນການ ແລະ ການລົງທຶນ ດຳເນີນການ;

9. ເປັນເຈົ້າການຄົ້ນຄ້ວາສັງລວມ ແລະ ຈັດລຽງບູລິມະສິດ ຊກພ ທີ່ຄູ່ຮ່ວມພັດທະນາ ສະເໜີໃຫ້ການຊ່ວຍເຫຼືອ ເພື່ອແຈ້ງໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເຮັດວຽກກັບຄູ່ຮ່ວມພັດທະນາ;

10. ເຂົ້າຮ່ວມໃນຂະບວນການສ້າງແຜນງານ ຫຼື ໂຄງການ ຊກພ ກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

11. ເປັນເຈົ້າການດຳເນີນກອງປະຊຸມກັບຄູ່ຮ່ວມພັດທະນາ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອທົບທວນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການປະຈຳແຕ່ລະໄຕມາດ, ປະຈຳຫົກເດືອນ ແລະ ປະຈຳປີ;

12. ສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບ ຊກພ;

13. ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສັງລວມ, ກວດກາ, ຢັ້ງຢືນຄວາມຖືກຕ້ອງ ແລະ ເອົາເຂົ້າແຜນທຶນສົມທົບສຳລັບແຜນງານ ຫຼື ໂຄງການ ຊກພ ເພື່ອສະເໜີລັດຖະບານ ພິຈາລະນາ ແລະ ສະພາແຫ່ງຊາດຮັບຮອງ;

14. ເປັນເຈົ້າການສ້າງລະບົບຖານຂໍ້ມູນລວມ ກ່ຽວກັບ ຊກພ ຢູ່ໃນຂອບເຂດທົ່ວປະເທດ ເພື່ອສະຫຼຸບການນຳໃຊ້ ຊກພ ໃຫ້ເປັນເອກະພາບກັນ ໂດຍການປະສານສົມທົບກັບກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອລາຍງານລັດຖະບານ ແລະ ສະພາແຫ່ງຊາດ;

15. ເປັນເຈົ້າການໃນການສັງລວມສະຫຼຸບຕົວເລກການນຳໃຊ້ ຊກພ ທີ່ເປັນການຊ່ວຍເຫຼືອລ້າ ເພື່ອລາຍງານສະພາແຫ່ງຊາດ ໂດຍການປະສານສົມທົບກັບກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງ, ອົງການທຽບລັດເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

16. ເຂົ້າຮ່ວມຄົ້ນຄວ້າສ້າງແຜນນຳເຂົ້າ ຂອງແຜນງານ ຫຼື ໂຄງການ ຊກພ ຕາມການສະເໜີຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ;

17. ເປັນເຈົ້າການດຳເນີນຂັ້ນຕອນ ຫຼື ເຊັນສັນຍາ ຮັບເອົາການຊ່ວຍເຫຼືອລ້າດ້ານວິຊາການ ສຳລັບການກະກຽມແຜນງານ ຫຼື ໂຄງການ ຫຼື ວຽກງານອື່ນໆ ທີ່ຄູ່ຮ່ວມພັດທະນາໃຫ້ການຊ່ວຍເຫຼືອຂະແໜງການຕ່າງໆ;

18. ປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ

ໃນການຄົ້ນຄວ້າອະນຸມັດ ແລະ ຄຸ້ມຄອງຊ່ຽວຊານ, ອາສາສະໝັກ ແລະ ນັກສຶກສາຝຶກງານຕ່າງປະ ເທດ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນງານ ຫຼື ໂຄງການ ຊກພ;

ເປັນເຈົ້າການສ້າງນິຕິກຳທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວ ເພື່ອຮັບປະກັນໃຫ້ມີຄວາມວ່ອງ ໄວ ແລະ ໂປ່ງໃສ;

19. ເປັນເຈົ້າການສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສະເໜີ ແລະ ຈັດຕັ້ງການຍ້ອງຍໍ ຜູ້ຕາງໜ້າອົງການຮ່ວມມືສອງຝ່າຍ, ຊ່ຽວຊານ, ອາສາສະໝັກ ທີ່ມາປະຕິບັດໜ້າທີ່ ພາຍໃຕ້ແຜນການ ຫຼື ໂຄງການ ຊກພ;

20. ສະໜອງຂໍ້ມູນກ່ຽວກັບຜົນຂອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຮ່ວມມືກັບຕ່າງປະເທດ ໃຫ້ກະຊວງການຕ່າງປະເທດຊາບ ເພື່ອເປັນຂໍ້ມູນໃນການຕິດຕາມ ແຕ່ລະໄລຍະ.

**ມາດຕາ 29 ຄວາມຮັບຜິດຊອບຂອງກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການ ຫຼື ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ກະຊວງ, ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສ້າງເອກະສານຍຸດທະສາດການຮ່ວມມືກັບຕ່າງປະເທດ ທີ່ເປັນຂອບການຮ່ວມມືລວມ ສຳລັບໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຊຶ່ງກວມເອົາຫຼາຍຂະແໜງການ ຫຼື ຂະແໜງການສະເພາະໃດໜຶ່ງທີ່ເປັນບູລິມະສິດ ຂອງລັດຖະບານ ພ້ອມທັງລົງນາມເອກະສານຍຸດທະສາດການຮ່ວມມືກັບຄູ່ຮ່ວມພັດທະນາ;

2. ເປັນໃຈກາງການປະສານງານ ແລະ ຕິດຕໍ່ພົວພັນກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນໃນການສະເໜີກ່ຽວກັບການຂໍຮັບ ຊກພ ແລະ ການຊ່ວຍເຫຼືອສຸກເສີນທຸກຮູບແບບ ບົນພື້ນຖານການຄຸ້ມຄອງວຽກງານການຕ່າງປະເທດຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

3. ເປັນເຈົ້າການປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງພາຍໃນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຊີ້ນຳສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ເພື່ອຜັນຂະຫຍາຍນະໂຍບາຍ, ທິດທາງ, ແຜນງານ ຫຼື ໂຄງການ ໃນແຕ່ລະໄລຍະຂອງລັດຖະບານ ໃນການລະດົມ ຊກພ ຕາມແນວທາງນະໂຍບາຍການຕ່າງປະເທດຂອງພັກ-ລັດ;

4. ເປັນເຈົ້າການສ້າງຍຸດທະສາດ, ແຜນການ, ແຜນງານ, ແຜນໂຄງການຮ່ວມມືຊ່ວຍເຫຼືອ ກັບອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ລວມທັງສະມາຄົມ, ສະຖາບັນ, ສະໂມສອນ, ກອງທຶນ, ມູນນິທິ, ບຸກຄົນ ແລະ ນິຕິບຸກຄົນ ຂອງຕ່າງປະເທດ ແລະ ພິຈາລະນາອະນຸມັດ ບົນພື້ນຖານການປະສານສົມທົບ ແລະ ການສະເໜີ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບນິຕິກຳຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂໍ້ 3 ຂອງດຳລັດສະບັບນີ້;

5. ເຂົ້າຮ່ວມການເຈລະຈາ, ກວດກາ ຮ່າງຍຸດທະສາດການຮ່ວມມືການຮ່ວມມືກັບຕ່າງປະເທດ ແລະ ສັນຍາ ຂອງແຜນງານ ຫຼື ໂຄງການ ຊກພ ຮ່ວມກັບກະຊວງແຜນການ ແລະ ການລົງທຶນ, ກະຊວງ

ການເງິນ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ;

6. ປະຕິບັດຂັ້ນຕອນທາງການທູດ ກ່ຽວກັບ ການອອກໜັງສືມອບສິດ ໃຫ້ກະຊວງ ແລະ ອົງການລັດທຽບເທົ່າກະຊວງອື່ນ ທີ່ກ່ຽວຂ້ອງ ລົງນາມສັນຍາແຜນງານ ຫຼື ໂຄງການ ຊກພ ຕາມການຕົກລົງຂອງລັດຖະບານ;

7. ເຂົ້າຮ່ວມເຄື່ອນໄຫວກັບກະຊວງ ແລະ ຂະແໜງການກ່ຽວຂ້ອງ ໃນການຕິດຕາມການຈັດຕັ້ງປະຕິບັດ ແລະ ປະເມີນແຜນງານ ຫຼື ໂຄງການ ຊກພ;

8. ປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງ ແລະ ເຂົ້າຮ່ວມການຝຶກອົບຮົມທາງດ້ານວິຊາການຕ່າງໆ ກ່ຽວກັບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ຊກພ;

9. ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສະເໜີ ແລະ ຈັດຕັ້ງການຍ້ອງຍໍ ສະມາຊິກຂອງສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ປະຈຳຢູ່ ສປປ ລາວ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ, ຫົວໜ້າຫ້ອງການປະສານງານປະຈຳພາກພື້ນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ມູນນິທິ, ສະຖາບັນ, ສະໂມສອນ, ກອງທຶນ ນິຕິບຸກຄົນ ແລະ ບຸກຄົນຂອງຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການປະກອບ ສ່ວນຊ່ວຍເຫຼືອ ສປປ ລາວ;

10. ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນຕົວເລກການນຳໃຊ້ ຊກພ ທີ່ບັນດາຄູ່ຮ່ວມພັດທະນາ ສະໜັບສະໜູນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຮ່ວມມືກັບອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ມູນນິທິ, ສະຖາບັນ, ສະໂມສອນ, ກອງທຶນ, ບຸກຄົນ ແລະ ນິຕິບຸກຄົນຂອງຕ່າງປະເທດ ເພື່ອລາຍງານໃຫ້ລັດຖະບານ ແລະ ສັງລວມເຂົ້າຖານຂໍ້ມູນ ທີ່ກະຊວງແຜນການ ແລະ ການລົງທຶນຄຸ້ມຄອງ;

11. ເປັນເຈົ້າການເກັບກຳ ແລະ ສັງລວມຕົວເລກການນຳໃຊ້ ຊກພ ທີ່ບັນດາປະເທດຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆໃຫ້ການຊ່ວຍເຫຼືອ ໂດຍຜ່ານອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ມູນນິທິ, ສະມາຄົມ, ສະຖາບັນ, ກອງທຶນ, ນິຕິບຸກຄົນ ລວມທັງການຊ່ວຍເຫຼືອຈາກບຸກຄົນຂອງຕ່າງປະເທດ ໂດຍສອດຄ່ອງກັບນິຕິກຳຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂໍ້ 3 ຂອງດຳລັດສະບັບນີ້;

12. ເຂົ້າຮ່ວມເຄື່ອນໄຫວກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຕິດຕາມການຈັດຕັ້ງປະຕິບັດໂຄງການ ຊກພ.

**ມາດຕາ 30 ຄວາມຮັບຜິດຊອບຂອງກະຊວງການເງິນ**

ກະຊວງການເງິນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບຄູ່ຮ່ວມພັດທະນາ ເພື່ອທາບທາມທຶນ ສຳລັບແຜນງານ ຫຼື ໂຄງການທີ່

ນອນຢູ່ໃນຂອບການຮ່ວມມື ແຕ່ລະໄລຍະ;

2. ປະສານສົມທົບ ແລະ ເຂົ້າຮ່ວມກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກະກຽມແຜນງານ ຫຼື ໂຄງການ ຊກພ ທີ່ເປັນການກູ້ຢືມ ແລະ ການຊ່ວຍເຫຼືອລ້າທີ່ຕິດພັນກັບການກູ້ຢືມໃນເງື່ອນໄຂຜ່ອນຜັນ;

3. ເປັນເຈົ້າການລາຍງານຜົນການປະເມີນຂັ້ນສຸດທ້າຍ ໃນການກະກຽມແຜນງານ ຫຼື ໂຄງການ ຊກພ ທີ່ເປັນການກູ້ຢືມ ແລະ ການຊ່ວຍເຫຼືອລ້າທີ່ຕິດພັນກັບການກູ້ຢືມໃນເງື່ອນໄຂຜ່ອນຜັນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ລັດຖະບານຮັບຮອງ;

4. ເປັນເຈົ້າການເຈລະຈາ, ເຊັນສັນຍາການສະໜອງ ຊກພ ຕາມການມອບໝາຍຂອງລັດຖະບານ ແລະ ດຳເນີນຂັ້ນຕອນເຮັດໃຫ້ສັນຍາມີຜົນສັກສິດ;

5. ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຮັບຜິດຊອບແຜນງານ ຫຼື ໂຄງການ ຈັດກອງປະຊຸມວິຊາການເລີ່ມຕົ້ນແຜນງານ ຫຼື ໂຄງການ ເພື່ອເຜີຍແຜ່ລະບຽບການ ແລະ ຂັ້ນຕອນການຄຸ້ມຄອງການເງິນ, ການຄຸ້ມຄອງລາຍຮັບ-ລາຍຈ່າຍໂຄງການ;

6. ເປັນເຈົ້າການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ການປະຕິບັດພັນທະພາສີ-ອາກອນ; ການເບີກຈ່າຍທຶນສົມທົບ ແລະ ການກວດກາການນຳໃຊ້ຊັບສິນ ຂອງແຜນງານ ຫຼື ໂຄງການ ຊກພ ທີ່ເປັນການກູ້ຢືມ ແລະ ການຊ່ວຍເຫຼືອລ້າທີ່ຕິດພັນກັບການກູ້ຢືມໃນເງື່ອນໄຂຜ່ອນຜັນ;

7. ພິຈາລະນາການອະນຸມັດ ແຜນການນຳເຂົ້າວັດຖຸອຸປະກອນ ແລະ ພາຫະນະຕ່າງໆ ທີ່ນຳໃຊ້ ຊກພ ຕາມການຕົກລົງໃນສັນຍາຮ່ວມມື, ສັນຍາສະໜອງທຶນ, ໜັງສື ຫຼື ບົດບັນທຶກມອບການຊ່ວຍເຫຼືອ;

8. ເປັນເຈົ້າການສັງລວມແຜນການນຳໃຊ້ ຊກພ ປະຈຳງວດ ແລະ ປະຈຳປີ ທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ສະໜອງໃຫ້ ເພື່ອເອົາເຂົ້າໃນແຜນງົບປະມານແຫ່ງລັດ ສະຫຼຸບສັງລວມຕົວເລກການນຳໃຊ້ ຊກພ (ທີ່ເປັນເງິນກູ້ຢືມ, ເງິນຊ່ວຍເຫຼືອລ້າທີ່ຕິດພັນກັບເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າທີ່ເບີກຈ່າຍຜ່ານກະຊວງການເງິນ) ເພື່ອລາຍງານລັດຖະບານ ແລະ ສະພາແຫ່ງຊາດ ໂດຍການປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

9. ຈັດກອງປະຊຸມຮ່ວມກັບບັນດາຂະແໜງການ ທີ່ຮັບຜິດຊອບແຜນງານ ຫຼື ໂຄງການ ເພື່ອຕິດຕາມ ແລະ ທົບທວນການຈັດຕັ້ງປະຕິບັດວຽກງານການເງິນ ແຕ່ລະໄຕມາດ ແລະ ປະຈຳປີ ຫຼື ຕາມຄວາມຈຳເປັນ;

10. ເປັນເຈົ້າການໃນການປະສານສົມທົບກັບຄູ່ຮ່ວມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຝຶກອົບຮົມກ່ຽວກັບການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ເປັນເຈົ້າການຄົ້ນຄວ້າເງື່ອນໄຂ ແລະ ເຊັນສັນຍາກູ້ຢືມຕໍ່ ໃຫ້ລັດວິສາຫະກິດ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດສັນຍາກູ້ຢືມຕໍ່, ສ້າງແຜນລາຍຮັບ ແລະ ສະຫຼຸບການປະຕິບັດການເກັບລາຍຮັບ ທີ່ຕິດພັນກັບເງິນກູ້ຢືມຕໍ່;

12. ເປັນເຈົ້າການຮັບຕ້ອນຄະນະບໍລິຫານຂອງສະຖາບັນການເງິນສາກົນ ເຊັ່ນ ຫົວໜ້າ ຫຼື ຮອງຫົວໜ້າຫ້ອງການກຸ່ມ ແລະ ຮອງປະທານ ຂຶ້ນໄປ;

13. ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ຄູ່ຮ່ວມພັດທະນາ ລົງຊຸກຍູ້ ແລະ ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ຫຼື ແຜນງານ ຊກພ ໃນແຕ່ລະໄລຍະ;

14. ເປັນເຈົ້າການສັງລວມຊັບສິນ ຂອງແຜນງານ ຫຼື ໂຄງການ ພາຍຫຼັງສິ້ນສຸດ ເພື່ອລາຍງານລັດຖະບານ ພິຈາລະນາ.

**ມາດຕາ 31 ຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ ລາວ**

ທະນາຄານ ແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບກົດໝາຍ ທີ່ກ່ຽວຂ້ອງ;
2. ຮັກສາ ແລະ ຄຸ້ມຄອງ ຄັງສຳຮອງເງິນຕາຕ່າງປະເທດ;
3. ເປີດບັນຊີເງິນຝາກຂອງຕົນ ແລະ ຂອງລັດຖະບານ ນຳທະນາຄານກາງຂອງຕ່າງປະເທດ, ອົງການຈັດຕັ້ງການເງິນສາກົນ ແລະ ສະຖາບັນການເງິນຕ່າງປະເທດ;
4. ຮັບເປີດບັນຊີເງິນຝາກໃຫ້ແກ່ລັດຖະບານ, ສະຖາບັນການເງິນ ແລະ ອົງການຈັດຕັ້ງສາກົນ;
5. ຄົ້ນຄວ້າປະກອບຄຳເຫັນໃຫ້ແກ່ລັດຖະບານ ໃນການກູ້ຢືມເງິນຕາຕ່າງປະເທດ ຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 32 ຄວາມຮັບຜິດຊອບຂອງກະຊວງຍຸຕິທຳ**

ກະຊວງຍຸຕິທຳ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເຂົ້າຮ່ວມໃນການເຈລະຈາເນື້ອໃນສັນຍາສະໜອງທຶນ ສຳລັບແຜນງານ ຫຼື ໂຄງການ ຊກພ;
2. ເປັນເຈົ້າການພິຈາລະນາ ແລະ ໃຫ້ຄຳເຫັນທາງດ້ານກົດໝາຍ ຕໍ່ສັນຍາສະໜອງທຶນ.

**ມາດຕາ 33 ຄວາມຮັບຜິດຊອບຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ ແລະ ກະຊວງການເງິນ ເພື່ອກຳນົດຍຸດທະສາດ, ຂອບການຮ່ວມມື ແລະ ແຜນການຮ່ວມມືກັບຕ່າງປະເທດ ໃນແຕ່ລະໄລຍະ ລວມທັງການລະດົມ ຊກພ ໂດຍຕິດພັນກັບຍຸດທະສາດຂະແໜງການຂອງຕົນ;

2. ດຳເນີນການທາບທາມ ຊກພ ຈາກຄູ່ຮ່ວມພັດທະນາ ເພື່ອຮັບໃຊ້ໃຫ້ແກ່ຍຸດທະສາດການພັດທະນາຂະແໜງການຂອງຕົນ ແລ້ວນຳສະເໜີກະຊວງແຜນການ ແລະ ການລົງທຶນ ເພື່ອເອົາເຂົ້າໃນແຜນ

ລະດົມທຶນ ຫຼື ຂໍອະນຸມັດຈາກລັດຖະບານ ເພື່ອຈັດຕັ້ງປະຕິບັດ;

3. ສ້າງແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າລະອຽດທີ່ກ່ຽວຂ້ອງ ກັບແຜນຍຸດທະສາດຂະແໜງການຂອງຕົນ ດໍາເນີນການເຈລະຈາ ແລະ ເຊັນສັນຍາຈັດຕັ້ງປະຕິບັດໂຄງການສະເພາະກັບຄູ່ຮ່ວມພັດທະນາ ຕາມການຕົກລົງເຫັນດີຂອງກະຊວງແຜນການ ແລະ ການລົງທຶນ;

4. ສ້າງແຜນງານ ຫຼື ໂຄງການ ຊກພ ພ້ອມທັງບົດວິພາກເສດຖະກິດ-ເຕັກນິກ ທີ່ຕ້ອງການນໍາໃຊ້ທຶນ ຈາກການກູ້ຢືມ ສະເໜີກະຊວງແຜນການ ແລະ ການລົງທຶນ ແລ້ວສົ່ງໃຫ້ກະຊວງການເງິນສັງລວມ ນໍາສະເໜີລັດຖະບານ ພິຈາລະນາຕົກລົງ;

5. ຂຶ້ນແຜນທຶນສົມທົບພາຍໃນ ໃຫ້ແກ່ແຜນງານ ຫຼື ໂຄງການ ຊກພ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ຕາມສັນຍາທີ່ເຊັນກັບຄູ່ຮ່ວມພັດທະນາແລ້ວ ສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຈັດເຂົ້າແຜນງົບປະມານພາຍໃນແຕ່ລະປີ, ພ້ອມທັງປະສານສົມທົບກັບທ້ອງຖິ່ນ ໃນການຂຶ້ນແຜນທຶນສົມທົບພາຍໃນສໍາລັບແຜນງານ ຫຼື ໂຄງການ ຊກພ ທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ;

6. ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມການເຄື່ອນໄຫວ ແລະ ສະເໜີຍ້ອງຍໍຊ່ຽວຊານ ຫຼື ອາສາສະໝັກຕ່າງປະເທດ ມາປະຕິບັດໜ້າທີ່ ປະຈໍາຢູ່ແຜນງານ ຫຼື ໂຄງການ ຊກພ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຊ່ວຍເຫຼືອ ສປປ ລາວ ໄປຍັງກະຊວງພາຍໃນ;

7. ສະເໜີຫາກະຊວງການເງິນ ເພື່ອຂໍອະນຸມັດແຜນນໍາເຂົ້າ, ວັດຖຸອຸປະກອນ ແລະ ພາຫານະຕ່າງໆ ທີ່ນໍາໃຊ້ ຊກພ ຕາມການຕົກລົງກັນໃນສັນຍາຮ່ວມມື, ສັນຍາສະໜອງທຶນ ຫຼື ໜັງສືແລກປ່ຽນທີ່ລັດຖະບານ ໄດ້ອະນຸຍາດໃຫ້ເຊັນກັບຄູ່ຮ່ວມພັດທະນາ;

8. ເປັນເຈົ້າການໃນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ ແລະ ສັງລວມລາຍງານການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການດັ່ງກ່າວ ລວມທັງການເຄື່ອນໄຫວຂອງຊ່ຽວຊານ, ອາສາສະໝັກຕ່າງປະເທດ ທີ່ມາປະຕິບັດໜ້າທີ່ຢູ່ ສປປ ລາວ ພາຍໃຕ້ທຶນ ຊກພ ເພື່ອລາຍງານກະຊວງແຜນການ ແລະ ການລົງທຶນ;

9. ສະຫຼຸບ, ສັງລວມ ການນໍາໃຊ້ ຊກພ ຕົວຈິງໃນແຕ່ລະໄຕມາດ ແລະ ແຕ່ລະປີ ທີ່ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ໄດ້ຮັບຈາກບັນດາຄູ່ຮ່ວມພັດທະນາ ໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ.

**ມາດຕາ 34 ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສະໜອງຂໍ້ມູນກ່ຽວກັບຍຸດທະສາດຂອງທ້ອງຖິ່ນຕົນ ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງການເງິນ ໃນການກໍານົດຍຸດທະສາດ, ຂອບການຮ່ວມມື ແລະ ແຜນການຮ່ວມມືກັບຄູ່ຮ່ວມພັດທະນາໃນແຕ່ລະໄລຍະ ລວມທັງການລະດົມ ຊກພ;

2. ດໍາເນີນການທາບທາມ ຊກພ ຈາກຄູ່ຮ່ວມພັດທະນາ ເພື່ອຮັບໃຊ້ຍຸດທະສາດພັດທະນາ ຂອງ

ທ້ອງຖິ່ນຕົນ ແລ້ວນຳສະເໜີກະຊວງແຜນການ ແລະ ການລົງທຶນ ເພື່ອເອົາເຂົ້າໃນແຜນລະດົມທຶນ ຫຼື ຂໍອະນຸມັດນຳລັດຖະບານ ເພື່ອຈັດຕັ້ງປະຕິບັດ;

3. ສ້າງແຜນງານ ຫຼື ໂຄງການ ຊກພ ລະອຽດທີ່ກ່ຽວຂ້ອງ ກັບແຜນຍຸດທະສາດຂອງທ້ອງຖິ່ນຕົນ ດຳເນີນການເຈລະຈາ ແລະ ເຊັນສັນຍາ ເພື່ອຈັດຕັ້ງປະຕິບັດໂຄງການສະເພາະກັບຄູ່ຮ່ວມພັດທະນາ ຕາມການຕົກລົງເຫັນດີຂອງກະຊວງແຜນການ ແລະ ການລົງທຶນ;

4. ສ້າງແຜນງານ ຫຼື ໂຄງການ ຊກພ ພ້ອມທັງບົດວິພາກ ເສດຖະກິດ-ເຕັກນິກ ທີ່ຕ້ອງການນຳໃຊ້ທຶນ ຈາກການກູ້ຢືມ ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ ແລ້ວສະເໜີກະຊວງແຜນການ ແລະ ການລົງທຶນ ແລ້ວສົ່ງໃຫ້ ກະຊວງການເງິນ ສັງລວມ ນຳສະເໜີລັດຖະບານ ພິຈາລະນາຕົກລົງ;

5. ເຂົ້າຮ່ວມໃນການກະກຽມ ແຜນງານ ຫຼື ໂຄງການ ຊກພ ຮ່ວມກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບການອອກແບບ ແລະ ວາງແຜນໃນການຈັດຕັ້ງປະຕິບັດ;

6. ຂຶ້ນແຜນທຶນສົມທົບພາຍໃນ ໃຫ້ແກ່ແຜນງານ ຫຼື ໂຄງການ ຊກພ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ຕາມສັນຍາທີ່ເຊັນກັບຄູ່ຮ່ວມພັດທະນາ ແລ້ວສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຈັດເຂົ້າແຜນງົບປະມານພາຍໃນແຕ່ລະປີ ພ້ອມທັງປະສານສົມທົບກັບກະຊວງ, ອົງການລັດທຽບທົ່ງກະຊວງ ຕາມສາຍຕັ້ງຂອງຕົນໃນການຂຶ້ນແຜນທຶນສົມທົບພາຍໃນ ສຳລັບແຜນງານ ຫຼື ໂຄງການ ທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ;

7. ຄຸ້ມຄອງ ແລະ ສະເໜີຍ້ອງຍໍຊ່ຽວຊານ ຫຼື ອາສາສະໝັກຕ່າງປະເທດ ທີ່ມາປະຕິບັດໜ້າທີ່ຕາມແຜນງານ ຫຼື ໂຄງການ ຊກພ ຢູ່ທ້ອງຖິ່ນຂອງຕົນ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນຊ່ວຍ ເຫຼືອ ສປປ ລາວ ແລ້ວສະເໜີຫາກະຊວງພາຍໃນ;

8. ສະເໜີຫາກະຊວງການເງິນ ເພື່ອຂໍອະນຸມັດແຜນນຳເຂົ້າ, ວັດຖຸອຸປະກອນ ແລະ ພາຫານະຕ່າງໆ ທີ່ນຳໃຊ້ ຊກພ ຕາມການຕົກລົງກັນໃນສັນຍາຮ່ວມມື, ສັນຍາສະໜອງທຶນ ຫຼື ໜັງສືແລກປ່ຽນທີ່ລັດຖະບານໄດ້ອະນຸຍາດໃຫ້ເຊັນກັບຄູ່ຮ່ວມພັດທະນາ;

9. ເປັນເຈົ້າການໃນການຈັດຕັ້ງປະຕິບັດຕາມແຜນງານ ຫຼື ໂຄງການ ຊກພ;

10. ສະຫຼຸບ, ສັງລວມ ການນຳໃຊ້ທຶນ ຊກພ ຕົວຈິງໃນແຕ່ລະງວດ ແລະ ປີ ທີ່ແຂວງໄດ້ຮັບໂດຍກົງຈາກບັນດາຄູ່ຮ່ວມພັດທະນາ ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ອົງການລັດທຽບເທົ່າກະຊວງ ຕາມສາຍຕັ້ງຂອງຕົນ;

11. ແຕ່ງຕັ້ງຄະນະປະສານງານ ແລະ ຄຸ້ມຄອງ ຊກພ ຂັ້ນແຂວງ ຫຼື ນະຄອນຫຼວງ, ພາຍໃຕ້ການເປັນປະທານ ຂອງຮອງເຈົ້າແຂວງ ຫຼື ຮອງເຈົ້າຄອງນະຄອນຫຼວງ ຊຶ່ງປະກອບດ້ວຍຕົວແທນຈາກພະແນກການຕ່າງໆ ແລະ ເມືອງທີ່ກ່ຽວຂ້ອງ ໂດຍແມ່ນພະແນກແຜນການ ແລະ ການລົງທຶນແຂວງ ຫຼື ນະຄອນຫຼວງ ເປັນກອງເລຂາ ໃຫ້ແກ່ຄະນະດັ່ງກ່າວ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 35 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ນຳໃຊ້ ຊກພ ເຂົ້າໃນເປົ້າໝາຍທີ່ບໍ່ຖືກຕ້ອງ ຫຼື ອ່ອຍທຶນ ໂດຍບໍ່ໄດ້ຮັບການຕົກລົງເຫັນດີຈາກກະຊວງ, ອົງການ ທີ່ກ່ຽວຂ້ອງ;

2. ສວຍໃຊ້ສິດ, ໜ້າທີ່ຕຳແໜ່ງ ຫຼື ອຳນາດ ເພື່ອຈັດສັນ ແລະ ຍາດແຍ່ງຜົນປະໂຫຍດຈາກ ຊກພ ຊຶ່ງຈະກໍ່ໃຫ້ເກີດຄວາມເສຍຫາຍ;

3. ຂັດຂວາງການກວດກາ, ການແກ້ໄຂກໍລະນີລະເມີດ ແລະ ການຈັດຕັ້ງປະຕິບັດຕາມລະບຽບການ ທີ່ຕິດພັນກັບການຄຸ້ມຄອງແຜນງານ ຫຼື ໂຄງການ ຊກພ;

4. ສະໜອງຂໍ້ມູນຊັກຊ້າ, ບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ ໃນເວລາລາຍງານການຈັດຕັ້ງປະຕິບັດ ແລະ ກໍລະນີເກີດບັນຫາໃນໄລຍະຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 36 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ

ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ແຕ່ງຕັ້ງ ຜົວ ຫຼື ເມຍ ຫຼື ລູກ ຫຼື ຍາດໃກ້ຊິດ ເຂົ້າຮັບຕຳແໜ່ງເປັນນາຍຄັງ, ນາຍບັນຊີການເງິນຢູ່ບ່ອນຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ;

2. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນການເງິນ ທີ່ເປັນຄວາມລັບຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ພົວພັນກັບງົບປະມານຂອງແຜນງານ ຫຼື ໂຄງການ ຊກພ;

3. ປະລະຄວາມຮັບຜິດຊອບໃນການດຳເນີນປະເມີນຂັ້ນຕອນຕ່າງໆ ກ່ອນຮັບ ແລະ ໃນໄລຍະຈັດຕັ້ງປະຕິບັດ ຊກພ;

4. ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ໄດ້ຮັບການມອບໝາຍ;

5. ເປີດບັນຊີຂອງໜ່ວຍງານຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງຂັ້ນເທິງຂອງຕົນ ແລະ ກະຊວງການເງິນ;

6. ຈ່າຍງົບປະມານບໍ່ຖືກຮ່ອງຕາມສາລະບານ, ຄິດໄລ່ບໍ່ຖືກຕ້ອງຕາມກົດໝາຍ, ໃຊ້ຈ່າຍ ແລະ ນຳໃຊ້ງົບປະມານບໍ່ຖືກຕາມເປົ້າໝາຍ;

7. ດຳເນີນການປະມູນ, ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ທີ່ໄດ້ມາຈາກການຊ່ວຍເຫຼືອ ຊກພ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາວຽກງານ ຊກພ

### ມາດຕາ 37 ອົງການຄຸ້ມຄອງວຽກງານ ຊກພ

ລັດຖະບານ ຄຸ້ມຄອງວຽກງານ ຊກພ ຢ່າງລວມສູນ ແລະ ເປັນເອກະພາບ ໂດຍມອບຄວາມຮັບຜິດຊອບ ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບ ກັບກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

ຄວາມຮັບຜິດຊອບຂອງລັດຖະບານ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງຍຸຕິທຳ, ທະນາຄານ ແຫ່ງ ສປປ ລາວ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໄດ້ກຳນົດໄວ້ໃນ ໝວດທີ 5: ມາດຕາ 27, 28, 29, 30, 31, 32, 33 ແລະ 34 ຂອງດຳລັດສະບັບນີ້.

### ມາດຕາ 38 ອົງການກວດກາວຽກງານ ຊກພ

ອົງການກວດກາວຽກງານ ຊກພ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນກົມກວດກາຂອງອົງການຄຸ້ມຄອງວຽກງານ ຊກພ;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

### ມາດຕາ 39 ເນື້ອໃນການກວດກາ

ເນື້ອໃນການກວດກາວຽກງານ ຊກພ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ຊກພ;
2. ການຈັດຕັ້ງການເຄື່ອນໄຫວຂອງວຽກງານຂອງອົງການຄຸ້ມຄອງວຽກງານ ຊກພ;
3. ການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ.

### ມາດຕາ 40 ຮູບການກວດກາ

ການກວດກາວຽກງານ ຊກພ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປົກກະຕິ, ມີກຳນົດເວລາອັນແນ່ນອນ ແລະ ຕ້ອງປະຕິບັດຢ່າງໜ້ອຍ ສອງຄັ້ງ ຕໍ່ປີ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ແລະ ຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກ

ກວດກາຊາບລ່ວງໜ້າ; ໃນການດຳເນີນການກວດກາແຕ່ລະຄັ້ງນັ້ນ ໃຫ້ກວດກາທັງເອກະສານ ພ້ອມທັງລົງກວດກາຢູ່ສະຖານທີ່ຕົວຈິງ ແລະ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ ໄດ້ດີ, ມີປະສິດທິພາບ ແລະ ປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

### ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 43 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງໃນການປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງຜັນຂະຫຍາຍດຳລັດສະບັບນີ້ ແລະ ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດໃຫ້ລັດຖະບານຊາບເປັນແຕ່ລະໄລຍະ;

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

### ມາດຕາ 44 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ;

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 75/ນຍ, ລົງວັນທີ 20 ມີນາ 2009.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 236/ລບ

ນະຄອນຫຼວງວຽງຈັນ, ວັນທີ 18. 05. 2020

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ການລະດົມທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ສປປ ລາວ ຮອດປີ 2030

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 06 ພະຈິກ 2016;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ເມສາ 2020, ເລກທີ 04/ລບ, ລົງວັນທີ 31 ມີນາ 2020;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0631/ກຜທ.ຮມສ-ອພມ.01, ລົງວັນທີ 27 ເມສາ 2020.

**ລັດຖະບານ ອອກດຳລັດ:**

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ຍຸດທະສາດການລະດົມທຶນຊ່ວຍເຫຼືອທາງການເພື່ອການພັດທະນາ 2030.

ມາດຕາ 2 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ມາດຕາ 3 ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 4 ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 624 /ລບ

ນະຄອນຫຼວງວຽງຈັນ, ວັນທີ 21.12.2020

# ດໍາລັດ
# ວ່າດ້ວຍການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2016;
- ອີງຕາມໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0811/ກຜທ.ລທ8, ລົງວັນທີ 02 ມິຖຸນາ 2020.

## ລັດຖະບານ ອອກດໍາລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອ

ຮັບປະກັນໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ, ຍຸຕິທຳ, ໂປ່ງໃສ, ກວດສອບໄດ້ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ, ແນໃສ່ສ້າງຄວາມເຊື່ອໝັ້ນ ແລະ ດຶງດູດການລົງທຶນຂອງພາກເອກະຊົນເຂົ້າໃນໂຄງການຂອງລັດ, ປົກປ້ອງຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງເອກະຊົນ ແລະ ປະຊາຊົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຂຽນເປັນພາສາອັງກິດ ວ່າ: Public Private Partnership "PPP" ແມ່ນ ກິດຈະການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ກິດຈະການທີ່ພາກເອກະຊົນ ເປັນຜູ້ລົງທຶນທັງໝົດເຂົ້າໃນໂຄງການຂອງລັດ ເປັນຕົ້ນ ໂຄງການກໍ່ສ້າງກິດຈະການໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະ, ລວມທັງໂຄງການພັດທະນາກິດຈະການອື່ນໆ ເປັນຕົ້ນ ທ່ອງທ່ຽວ, ກະສິກຳ, ພະລັງງານ, ບໍ່ແຮ່ ແລະ ອື່ນໆ ພາຍໃຕ້ສັນຍາການລົງທຶນຮ່ວມ ໃນກຳນົດເວລາອັນແນ່ນອນໃນການດຳເນີນງານທຸລະກິດ ທີ່ສອດຄ່ອງກັບກົດໝາຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການລົງທຶນຮ່ວມ** ໝາຍເຖິງ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງດຳລັດສະບັບນີ້;

2. **ໂຄງການຂອງລັດ** ໝາຍເຖິງ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນທີ່ນຳໃຊ້ຊັບພະຍາກອນທຳມະຊາດ, ຊັບສິນ, ລິຂະສິດ ຂອງລັດ ເຂົ້າໃສ່ໃນການພັດທະນາໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການທີ່ມີແລ້ວ ຫຼື ເປັນໂຄງການພັດທະນາໃໝ່ (Green field) ຕາມແຜນຍຸດທະສາດໃນແຕ່ລະໄລຍະ;

3. **ຜູ້ປະມູນ** ໝາຍເຖິງ ນິຕິບຸກຄົນພາຍໃນ ຫຼື ຕ່າງປະເທດທີ່ມີເງື່ອນໄຂເຂົ້າຮ່ວມແຂ່ງຂັນການປະມູນໂຄງການລົງທຶນຮ່ວມ;

4. **ຜູ້ໃຫ້ທຶນ** ໝາຍເຖິງ ລັດ, ສະຖາບັນການເງິນພາຍໃນ, ຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນທີ່ສະໜອງເງິນກູ້ຢືມ/ສິນເຊື່ອ, ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ/ຫຼື ໃຫ້ທຶນຊ່ວຍເຫຼືອ ເພື່ອພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

5. **ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ** ໝາຍເຖິງ ເອກະສານການສຶກສາໂຄງການທີ່ກຳນົດຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ຄິດໄລ່ການລົງທຶນ, ຜົນໄດ້ຮັບໃນການລົງທຶນ, ຄວາມສອດຄ່ອງທາງດ້ານກົດໝາຍ, ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ, ລັກສະນະຂອງຄວາມສ່ຽງ, ຄວາມຍືນຍົງຂອງໂຄງການ, ການສຶກສາຜົນກະທົບເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ນັບທັງການແກ້ໄຂຜົນກະທົບດັ່ງກ່າວຂອງໂຄງການ;

**6. ການຊ່ວຍເຫຼືອທາງການເພື່ອການພັດທະນາ** ໝາຍເຖິງ ການຊ່ວຍເຫຼືອທາງດ້ານເຕັກນິກ-ວິຊາການ ແລະ ດ້ານການເງິນ ລວມທັງວັດຖຸພັນຊຶ່ງປະກອບມີ ການຊ່ວຍເຫຼືອລ້າ ແລະ ການກູ້ຢືມໃນເງື່ອນໄຂຜ່ອນຜັນທີ່ ສປປ ລາວ ໄດ້ຮັບຈາກຄູ່ຮ່ວມໃນການພັດທະນາຢ່າງເປັນທາງການ ເພື່ອການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ;

**7. ພາກເອກະຊົນ** ໝາຍເຖິງ ນິຕິບຸກຄົນເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກລົງທຶນຮ່ວມໃນກິດຈະການຂອງລັດ ເຂົ້າໃນການພັດທະນາໂຄງການ ຕາມທີ່ໄດ້ກຳນົດໄວ້ໃນດຳລັດ;

**8. ບໍລິສັດໂຄງການລົງທຶນຮ່ວມ** ໝາຍເຖິງ ບໍລິສັດທີ່ຖືກສ້າງຕັ້ງຂຶ້ນໂດຍ ນິຕິບຸກຄົນ ຫຼື ກຸ່ມນິຕິບຸກຄົນ ທີ່ຊະນະການປະມູນ ຕາມດຳລັດສະບັບນີ້, ໂດຍສອດຄອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;

**9. ຂະແໜງການ** ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງແຂວງ, ນະຄອນຫຼວງ;

**10. ເຈົ້າຂອງໂຄງການ** ໝາຍເຖິງ ຂະແໜງການກ່ຽວຂ້ອງທີ່ໄດ້ຮັບມອບໝາຍໃຫ້ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ທີ່ໄດ້ຮັບການຮັບຮອງຈາກລັດຖະບານ ແລະ ມີສັນຍາສຳປະທານແລ້ວ;

**11. ທຶນສຳລັບການກະກຽມໂຄງການ** ໝາຍເຖິງ ທຶນທີ່ຖືກຈັດສັນໄວ້ ເພື່ອນຳໃຊ້ເຂົ້າໃນການກະກຽມໂຄງການຊຶ່ງເລີ່ມແຕ່ຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການຈົນເຖິງຂັ້ນຕອນສຳເລັດການອອກແບບ ແລະ ປະມູນໂຄງການ;

**12. ໂຄງການລົງທຶນຮ່ວມ** ໝາຍເຖິງ ໂຄງການພັດທະນາຂະແໜງການຕ່າງໆຂອງລັດ ທີ່ນອນໃນແຜນການພັດທະນາເສດຖະກິດ-ສັງຄົມຂອງລັດ ທີ່ຖືກຮັບຮອງ ແລະ ອະນຸມັດຈາກຂັ້ນເທິງທີ່ມີສິດອຳນາດໃຫ້ດຳເນີນການພັດທະນາ ພາຍໃຕ້ຮູບການລົງທຶນຮ່ວມຂອງລັດ ແລະ ເອກະຊົນ;

**13. ລັດວິສາຫະກິດ** ໝາຍເຖິງ ວິສາຫະກິດທີ່ລັດເປັນຜູ້ສ້າງຕັ້ງຂຶ້ນ ແລະ ມີທຶນຫຼາຍກວ່າ ຫ້າສິບສ່ວນຮ້ອຍຂຶ້ນໄປ ຫຼື ການຫັນວິສາຫະກິດອື່ນມາເປັນຂອງລັດ ຕາມການຕົກລົງເປັນເອກະພາບກັນ;

**14. ຄວາມກຸ້ມຄ່າຂອງການລົງທຶນ** ໝາຍເຖິງ ປະສິດທິພາບ ແລະ ປະສິດທິຜົນ ໃນການລົງທຶນເຂົ້າໃນໂຄງການ;

**15. ແຜນງົບປະມານຊຳລະໂຄງການ** ໝາຍເຖິງ ແຜນລາຍຈ່າຍທີ່ກຳນົດໄວ້ໃນແຜນງົບປະມານ ແລະ ໃນສັນຍາການລົງທຶນຮ່ວມ ເພື່ອຊຳລະໃຫ້ແກ່ໂຄງການຕາມທີ່ໄດ້ເຊັນສັນຍາແລ້ວເປັນແຕ່ລະປີຈົນຄົບຖ້ວນຕາມກຳນົດເວລາຂອງສັນຍາ;

**16. ສັນຍາ** ໝາຍເຖິງ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

**17. ຄູ່ສັນຍາ** ໝາຍເຖິງ ລັດຖະບານ ຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ ແລະ ນິຕິບຸກຄົນເອກະຊົນທີ່ຊະນະການປະມູນ ຕາງໜ້າໂດຍບໍລິສັດໂຄງການ;

**18. ຫລອ** ໝາຍເຖິງ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ລັດ ຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຮ່ວມລົງທຶນກັບພາກລັດ ດ້ວຍການວາງນະໂຍບາຍ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂອໍານວຍຄວາມສະດວກ, ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການ, ການໃຫ້ນະໂຍບາຍດ້ານພາສີ, ອາກອນ, ດ້ານແຮງງານ, ການໃຫ້ສິດນໍາໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ການປະຕິບັດຄວາມສະເໝີພາບ ເພື່ອໃຫ້ສາມາດລົງທຶນຮ່ວມກັນໃນໂຄງການກໍ່ສ້າງໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະໃນຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ດໍາລັດສະບັບນີ້.

ລັດ ສົ່ງເສີມໂຄງການລົງທຶນຮ່ວມ ທີ່ບໍ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ບໍ່ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທໍາອັນດີງາມຂອງຊາດ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານລົງທຶນຮ່ວມ**

ວຽກງານລົງທຶນຮ່ວມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

3. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໂດຍມີການແບ່ງຄວາມຮັບຜິດຊອບໃຫ້ຂະແໜງການທີ່ກ່ຽວຂ້ອງຢ່າງຈະແຈ້ງ;

4. ຮັບປະກັນ ຄວາມເປັນເຈົ້າການ ໃນການພັດທະນາ ແລະ ຄຸ້ມຄອງໂຄງການຂອງຂະແໜງການ; ການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການບໍລິຫານຄວາມສ່ຽງໂຄງການ ລະຫວ່າງເຈົ້າຂອງໂຄງການ ແລະ ບໍລິສັດໂຄງການລົງທຶນຮ່ວມຢ່າງເໝາະສົມ, ຄວາມສະເໝີພາບ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;

5. ເປີດເຜີຍຂໍ້ມູນກ່ຽວກັບການປະມູນ, ມູນຄ່າ, ຜົນປະໂຫຍດ ແລະ ຄວາມສ່ຽງ ໃນການລົງທຶນຮ່ວມ ລວມທັງລະບຽບການທີ່ມີຜົນກະທົບໂດຍກົງຕໍ່ການລົງທຶນຮ່ວມ;

6. ຮັບປະກັນຜົນປະໂຫຍດສູງສຸດ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ບົນພື້ນຖານການສຶກສາຜົນກະທົບ, ຄວາມເປັນໄປໄດ້ ແລະ ຄວາມກຸ້ມຄ່າຂອງການລົງທຶນ.

**ມາດຕາ 6 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານລົງທຶນຮ່ວມ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານລົງທຶນຮ່ວມດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ ແລະ ວິຊາການ ດ້ານການ

ສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຮູບການ, ຮູບແບບ ແລະ ເງື່ອນໄຂ ຂອງການລົງທຶນຮ່ວມ

### ມາດຕາ 8 ຮູບການ ການລົງທຶນຮ່ວມ

ການລົງທຶນຮ່ວມ ມີ ສອງ ຮູບການ ດັ່ງນີ້:

1. ການລົງທຶນຮ່ວມ ໂດຍມີພາກລັດເຂົ້າຮ່ວມລົງທຶນ;
2. ການລົງທຶນຮ່ວມ ໂດຍພາກເອກະຊົນລົງທຶນທັງໝົດ.

### ມາດຕາ 9 ການລົງທຶນຮ່ວມ ໂດຍມີພາກລັດເຂົ້າຮ່ວມລົງທຶນ

ການລົງທຶນຮ່ວມ ໂດຍມີພາກລັດເຂົ້າຮ່ວມລົງທຶນ ແມ່ນການປະກອບທຶນສົມທົບຂອງລັດໂດຍກົງເຂົ້າໃນການພັດທະນາໂຄງການຮ່ວມກັບພາກເອກະຊົນ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ ຫຼື ການຮັບຮອງໂດຍສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນແຕ່ລະກໍລະນີ.

ລັດ ຈະເຂົ້າຮ່ວມລົງທຶນ ຕາມຮູບແບບທີ່ໄດ້ກໍານົດໄວ້ ໃນມາດຕາ 11 ຂອງດໍາລັດສະບັບນີ້ ຖ້າຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ມີປະສິດພາບສູງ, ມີການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ເປັນໂຄງການທີ່ມີລັກສະນະຍຸດທະສາດ ບົນພື້ນຖານການມີສັນຍາຮ່ວມກັນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

### ມາດຕາ 10 ການລົງທຶນຮ່ວມ ໂດຍພາກເອກະຊົນລົງທຶນທັງໝົດ

ການລົງທຶນຮ່ວມໂດຍພາກເອກະຊົນລົງທຶນທັງໝົດ ແມ່ນພາກເອກະຊົນເປັນຜູ້ຮັບຜິດຊອບລົງທຶນທັງໝົດເຂົ້າໃນການພັດທະນາໂຄງການຂອງລັດ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ ຫຼື ການຮັບຮອງໂດຍສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນແຕ່ລະກໍລະນີ.

### ມາດຕາ 11 ຮູບແບບລົງທຶນຮ່ວມ

ຮູບແບບ ການລົງທຶນຮ່ວມ ມີດັ່ງນີ້:

1. ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດໍາເນີນງານ (Design Build Finance Operate-DBFO);
2. ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (Design Build Operate-DBO);

3. ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ (Build Operate Transfer-BOT);

4. ກໍ່ສ້າງ, ເປັນເຈົ້າຂອງ, ດໍາເນີນງານ ແລະ ມອບໂອນ (Build Own Operate Transfer-BOOT);

5. ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ (Build Own Operate-BOO);

6. ກໍ່ສ້າງ, ມອບຮັບ ແລະ ດໍາເນີນງານ (Build Transfer Operate-BTO);

7. ກໍ່ສ້າງ, ເຊົ່າ ແລະ ມອບໂອນ (Build Lease Transfer-BLT);

8. ດໍາເນີນງານ ແລະ ບໍາລຸງຮັກສາ (Operate and Maintenance-O&M);

9. ຮູບແບບອື່ນ ຕາມການຕົກລົງເຫັນດີຂອງລັດຖະບານ.

**ມາດຕາ 12 ການລົງທຶນຮ່ວມ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດໍາເນີນງານ (DBFO)**

ການລົງທຶນຮ່ວມ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດໍາເນີນງານ ແມ່ນການລົງທຶນທີ່ມີລັກສະນະ ດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ໃຫ້ພາກເອກະຊົນເຂົ້າມາຮ່ວມພັດທະນາ ດ້ວຍທຶນຂອງພາກເອກະຊົນທັງໝົດ ຫຼື ສ່ວນໃຫຍ່ ເລີ່ມແຕ່ການອອກແບບ, ກໍ່ສ້າງ, ຈົນຮອດການດໍາເນີນງານ ແລະ ບໍາລຸງຮັກສາຕະຫຼອດອາຍຸຂອງໂຄງການ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ພາກລັດກໍານົດໃຫ້ ໂດຍມີສັນຍາການລົງທຶນຮ່ວມ;

2. ການບໍາລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນຕະຫຼອດອາຍຸຂອງສັນຍາ;

3. ແຫຼ່ງທຶນໃນການຊໍາລະ ໃນກໍລະນີພາກລັດປະກອບທຶນ ແມ່ນຈັດສັນຈາກງົບປະມານຂອງລັດທີ່ໄດ້ກໍານົດໄວ້ໃນແຜນງົບປະມານຊໍາລະໂຄງການ. ການຊໍາລະ ແມ່ນປະຕິບັດໃນໄລຍະດໍາເນີນງານໂດຍອີງໃສ່ຜົນຂອງການບໍລິການທີ່ປະຕິບັດໄດ້ຕົວຈິງຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນບົດວິພາກ ເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ຕະຫຼອດໄລຍະອາຍຸຂອງສັນຍາ. ໃນກໍລະນີພາກລັດບໍ່ເຂົ້າຮ່ວມທຶນ ແມ່ນພາກເອກະຊົນເກັບລາຍຮັບໂດຍກົງຈາກໂຄງການ;

4. ພາກເອກະຊົນມອບໂຄງການຄືນຢູ່ໃນສະພາບດີ ໃຫ້ລັດຖະບານເມື່ອສິ້ນສຸດສັນຍາ.

**ມາດຕາ 13 ການລົງທຶນຮ່ວມໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ (DBO)**

ການລົງທຶນຮ່ວມໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ ແມ່ນການລົງທຶນທີ່ມີລັກສະນະ ດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ວ່າຈ້າງໃຫ້ພາກເອກະຊົນມາອອກແບບ, ກໍ່ສ້າງ ແລະ ດໍາເນີນງານຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກໍານົດໃຫ້ໂດຍມີສັນຍາ. ສໍາລັບການດໍາເນີນງານສາມາດດໍາເນີນພາຍໃຕ້ສັນຍາ ຫຼື ສັນຍາດໍາເນີນງານຕ່າງຫາກ;

2. ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນຕະຫຼອດອາຍຸຂອງສັນຍາ;

3. ການຊຳລະ ແມ່ນປະຕິບັດເປັນສອງສ່ວນ ຄື ສຳລັບການອອກແບບ ແລະ ກໍ່ສ້າງ ໃຫ້ຊຳລະພາຍຫຼັງສຳເລັດການກໍ່ສ້າງ ໂດຍຈ່າຍເປັນງວດຕາມການຕົກລົງ ແລະ ສຳລັບການດຳເນີນງານຕະຫຼອດໄລຍະອາຍຸຂອງສັນຍາໃຫ້ຊຳລະຕາມຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການຕົວຈິງ ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ;

4. ແຫຼ່ງທຶນໃນການຊຳລະ ແມ່ນນຳໃຊ້ງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ໃນແຜນງົບປະມານຊຳລະໂຄງການ ແລະ ຈັດສັນຈາກລາຍຮັບທີ່ລັດເກັບໄດ້ໂດຍກົງຈາກໂຄງການ.

**ມາດຕາ 14 ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT)**

ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ ແມ່ນການລົງທຶນທີ່ມີລັກສະນະ ດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ໃຫ້ສິດສຳປະທານແກ່ພາກເອກະຊົນ ເພື່ອດຳເນີນການສຶກສາສຳຫຼວດ, ອອກແບບ ກໍ່ສ້າງ ແລະ ດຳເນີນງານ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ ໂດຍມີສັນຍາ;

2. ພາກເອກະຊົນເປັນຜູ້ຮັບຜິດຊອບລົງທຶນ, ລາຍຮັບ ແລະ ລາຍຈ່າຍ ທັງໝົດຂອງໂຄງການ ຕາມທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ;

3. ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນຕະຫຼອດອາຍຸຂອງສັນຍາ;

4. ພາກເອກະຊົນ ຕ້ອງມອບໂອນໂຄງການທີ່ຢູ່ໃນສະພາບດີ ຕາມທີ່ກຳນົດໄວ້ໃນວັກສອງ ມາດຕາ 55 ຂອງດຳລັດສະບັບນີ້ ຄືນໃຫ້ພາກລັດ ພາຍຫຼັງສິ້ນສຸດສັນຍາ.

**ມາດຕາ 15 ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ມອບໂອນ (BOOT)**

ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ມອບໂອນ ແມ່ນການລົງທຶນທີ່ມີລັກສະນະ ດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ມີຂະໜາດໃຫຍ່ ແລະ ເຕັກນິກສັບສົນ ທີ່ລັດເປັນເຈົ້າຂອງ, ແຕ່ໃຫ້ສິດສຳປະທານແກ່ພາກເອກະຊົນ ເພື່ອດຳເນີນການສຶກສາສຳຫຼວດ, ອອກແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ໂດຍມີສັນຍາການລົງທຶນຮ່ວມ;

2. ພາກເອກະຊົນ ເປັນຜູ້ຮັບຜິດຊອບລົງທຶນ, ລາຍຮັບ ແລະ ລາຍຈ່າຍທັງໝົດຂອງໂຄງການຕະຫຼອດອາຍຸຂອງສັນຍາຕາມທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາ ທີ່ໄດ້ເຊັນກັບລັດຖະບານ;

3. ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນຕະຫຼອດອາຍຸຂອງສັນຍາ;

4. ພາກເອກະຊົນ ຕ້ອງມອບໂອນໂຄງການທີ່ຢູ່ໃນສະພາບດີ ຕາມທີ່ກຳນົດໄວ້ໃນວັກສອງ ມາດຕາ 55 ຂອງດຳລັດສະບັບນີ້ ຄືນໃຫ້ພາກລັດ ພາຍຫຼັງສິ້ນສຸດສັນຍາ.

**ມາດຕາ 16 ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (BOO)**

ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ ແມ່ນການລົງທຶນທີ່ມີລັກສະນະ ດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ມອບສິດສຳປະທານໃຫ້ແກ່ພາກເອກະຊົນ ເພື່ອດຳເນີນການສຶກສາສຳຫຼວດ, ອອກແບບກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໃຫ້ໂດຍມີສັນຍາ;

2. ພາກເອກະຊົນ ເປັນຜູ້ຮັບຜິດຊອບລົງທຶນ, ລາຍຮັບ ແລະ ລາຍຈ່າຍທັງໝົດຂອງໂຄງການຕະຫຼອດອາຍຸຂອງສັນຍາ ຕາມທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ທີ່ຖືກຮັບຮອງ ແລະ ສັນຍາທີ່ເຊັນກັບລັດຖະບານ;

3. ການບຳລຸງຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍ ແມ່ນຢູ່ໃນຄວາມຮັບຜິດຊອບຂອງພາກເອກະຊົນຕະຫຼອດອາຍຸຂອງສັນຍາ;

4. ພາຍຫຼັງສິ້ນສຸດສັນຍາ ພາກເອກະຊົນບໍ່ມອບໂຄງການຄືນໃຫ້ພາກລັດ.

**ມາດຕາ 17 ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ມອບຮັບ ແລະ ດຳເນີນງານ (BTO)**

ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ມອບຮັບ ແລະ ດຳເນີນງານ ແມ່ນການລົງທຶນທີ່ມີລັກສະນະ ດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ມອບສິດໃຫ້ພາກເອກະຊົນເປັນຜູ້ລົງທຶນໃນການອອກແບບ ແລະ ກໍ່ສ້າງ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໂດຍມີສັນຍາ, ພາຍຫຼັງສຳເລັດການກໍ່ສ້າງແລ້ວ ມອບໂຄງການໃຫ້ພາກລັດ;

2. ພາກລັດ ຈະໃຫ້ພາກເອກະຊົນທີ່ໄດ້ລົງທຶນ ຕາມຂໍ້ 1 ຂອງມາດຕານີ້ ເຊົ່າສິ່ງກໍ່ສ້າງ ຫຼື ການບໍລິການ ເພື່ອດຳເນີນງານໂດຍມີສັນຍາເຊົ່າຮ່ວມກັນ;

3. ພາກເອກະຊົນເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ການດຳເນີນທຸລະກິດ ແລະ ເກັບລາຍຮັບທັງໝົດຈາກໂຄງການຕະຫຼອດອາຍຸສັນຍາເຊົ່າ.

**ມາດຕາ 18 ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ (BLT)**

ການລົງທຶນຮ່ວມ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ ແມ່ນການລົງທຶນທີ່ມີລັກສະນະດັ່ງນີ້:

1. ເປັນໂຄງການພັດທະນາ, ປັບປຸງໂຄງລ່າງພື້ນຖານ ແລະ ການສະໜອງການບໍລິການ ທີ່ລັດເປັນເຈົ້າຂອງ, ແຕ່ວ່າຈ້າງໃຫ້ພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດໂດຍມີສັນຍາ, ພາຍຫຼັງສຳເລັດການກໍ່ສ້າງແລ້ວ ມອບໂຄງການໃຫ້ພາກລັດ;

2. ພາກລັດ ຄັດເລືອກພາກເອກະຊົນ ເພື່ອເຊົ່າສິ່ງກໍ່ສ້າງ ຫຼື ຮ່ວມສະໜອງການບໍລິການ ໂດຍມີສັນຍາເຊົ່າ ຫຼື ຮ່ວມທຸລະກິດນຳກັນ;

3. ຕະຫຼອດອາຍຸສັນຍາເຊົ່າ ພາກເອກະຊົນເປັນຜູ້ຮັບຜິດຊອບໂດຍກົງຕໍ່ການດຳເນີນທຸລະກິດ ແລະ ເກັບລາຍຮັບທັງໝົດຈາກໂຄງການ;

4. ພາຍຫຼັງສິ້ນສຸດສັນຍາເຊົ່າ ພາກເອກະຊົນ ຕ້ອງມອບໂຄງການຄືນໃຫ້ພາກລັດໃນສະພາບທີ່ດີ ຕາມທີ່ກຳນົດໄວ້ໃນວັກສອງ ມາດຕາ 55 ຂອງດຳລັດສະບັບນີ້;

5. ແຫຼ່ງທຶນໃນການຊຳລະຄ່າອອກແບບ ແລະ ກໍ່ສ້າງ ແມ່ນນຳໃຊ້ງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ໃນແຜນງົບປະມານຊຳລະໂຄງການ ຊຶ່ງສາມາດຊຳລະເທື່ອດຽວ ຫຼື ເປັນງວດ ຕາມສັນຍາ.

**ມາດຕາ 19 ການລົງທຶນຮ່ວມໃນຮູບແບບ ດຳເນີນງານ ແລະ ບຳລຸງຮັກສາ (O&M)**

ການລົງທຶນຮ່ວມ ໃນຮູບແບບ ດຳເນີນງານ ແລະ ບຳລຸງຮັກສາ ແມ່ນການລົງທຶນທີ່ມີລັກສະນະດັ່ງນີ້:

1. ເປັນໂຄງການໂຄງລ່າງພື້ນຖານ ແລະ ການບໍລິການ ທີ່ມີແລ້ວ ຊຶ່ງລັດເປັນເຈົ້າຂອງ, ແຕ່ວ່າຈ້າງໃຫ້ພາກເອກະຊົນເປັນຜູ້ດຳເນີນງານ ແລະ ບຳລຸງຮັກສາ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕາມເງື່ອນໄຂ ແລະ ມາດຕະຖານທີ່ພາກລັດກຳນົດ ໂດຍມີສັນຍາ;

2. ແຫຼ່ງທຶນໃນການຊຳລະຄ່າ ດຳເນີນງານ ແລະ ບຳລຸງຮັກສາ ແມ່ນນຳໃຊ້ງົບປະມານຂອງລັດ ທີ່ໄດ້ກຳນົດໄວ້ໃນແຜນງົບປະມານຊຳລະໂຄງການ ຊຶ່ງອາດຊຳລະແບບມອບເໝົາ ຫຼື ເປັນງວດ ອີງຕາມຜົນຂອງການໃຫ້ການດຳເນີນງານຕົວຈິງຕາມສັນຍາ.

**ມາດຕາ 20 ເງື່ອນໄຂຂອງການລົງທຶນຮ່ວມ**

ການລົງທຶນຮ່ວມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສັນຍາຮ່ວມ ລະຫວ່າງ ພາກລັດ ກັບ ພາກເອກະຊົນ;

2. ເປັນໂຄງການກໍ່ສ້າງໃໝ່ ຫຼື ການປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການ ແກ່ສາທາລະນະ ໂດຍເນັ້ນໃສ່ຜົນໄດ້ຮັບ ແລະ ຄວາມກຸ້ມຄ່າຂອງໂຄງການ;

3. ກຳນົດຄວາມຮັບຜິດຊອບຕໍ່ຄວາມສ່ຽງດ້ານຕ່າງໆຂອງໂຄງການ ເປັນຕົ້ນຄວາມສ່ຽງດ້ານການກໍ່ສ້າງ, ຄວາມຕ້ອງການຂອງຕະຫຼາດ, ລາຍຮັບ ແລະ ພັນທະຂອງບໍລິສັດໂຄງການລົງທຶນຮ່ວມບົນພື້ນຖານຕ້ອງຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ຂອງການລົງທຶນ;

4. ຮັບປະກັນສິດຜົນປະໂຫຍດຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ;

5. ມີການປະມູນ ແບບເປີດກວ້າງ ແລະ ໂປ່ງໃສ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ມີການມອບຮັບ ຫຼື ມອບໂອນໂຄງການຄືນໃຫ້ພາກລັດ ຫຼັງຈາກສິ້ນສຸດສັນຍາການລົງທຶນຮ່ວມ (ຍົກເວັ້ນ ທີ່ໄດ້ກຳນົດໄວ້ໃນມາດຕາ 16 ການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ “BOO”).

**ມາດຕາ 21 ການເລືອກຮູບການ ແລະ ຮູບແບບການລົງທຶນຮ່ວມ**

ການເລືອກເອົາຮູບການ ແລະ ຮູບແບບການລົງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຫາ 19 ຂອງດຳລັດສະບັບນີ້ ໃຫ້ອີງຕາມ ປະສິດທິຜົນ, ປະເພດ, ຂະໜາດ, ມູນຄ່າ, ເງື່ອນໄຂ ແລະ ລັກສະນະຈຸດພິເສດສະເພາະຂອງໂຄງການລົງທຶນຮ່ວມ ບົນພື້ນຖານຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການ.

ຜົນຂອງການສຶກສາຄວາມເປັນໄປໄດ້ຂອງຂະແໜງການ ແລະ/ຫຼື ຜູ້ລົງທຶນ ທີ່ໄດ້ສຶກສາລະອຽດແລ້ວ ກ່ອນຈະໄດ້ຮັບການພັດທະນາໂຄງການ ຕ້ອງແມ່ນລັດຖະບານ ເປັນຜູ້ພິຈາລະນາຕົກລົງເລືອກເອົາຮູບການ ແລະ ຮູບແບບການລົງທຶນຮ່ວມ.

## ພາກທີ III

## ການກະກຽມ, ການພິຈາລະນາ ແລະ ການປະມູນ ໂຄງການລົງທຶນຮ່ວມ

### ໝວດທີ 1

### ການກະກຽມ ແລະ ການພິຈາລະນາ ໂຄງການລົງທຶນຮ່ວມ

**ມາດຕາ 22 ບົດສະເໜີເບື້ອງຕົ້ນ ແລະ ບົດສະເໜີແນວຄວາມຄິດລິເລີ່ມ ຂອງໂຄງການລົງທຶນຮ່ວມ**

ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ (Solicited Proposal) ແມ່ນເອກະສານສະເໜີແນວຄວາມຄິດເບື້ອງຕົ້ນຂອງຂະແໜງການ ທີ່ນອນໃນແຜນຍຸດທະສາດຂອງຂະແໜງການ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ມີຈຸດປະສົງຢາກໃຫ້ພາກເອກະຊົນມາລົງທຶນຕາມຮູບການທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້.

ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ (Unsolicited Proposal) ແມ່ນເອກະສານຂອງໂຄງການທີ່ລິເລີ່ມໃໝ່ ໂດຍຂະແໜງການ ຫຼື ພາກເອກະຊົນ ທີ່ສອດຄ່ອງກັບແຜນນະໂຍບາຍພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ, ເປັນໂຄງການທີ່ມີຄວາມສຳຄັນ, ເປັນແນວຄວາມຄິດໃໝ່, ມີການນຳໃຊ້ເຕັກໂນໂລຊີໃໝ່ ແລະ ນະວັດຕະກຳສູງ ທີ່ເປັນໂຄງການບໍ່ນອນໃນແຜນການລົງທຶນຂອງລັດ.

ສຳລັບຄຳແນະນຳໃນການຮ່າງ ບົດສະເໜີເບື້ອງຕົ້ນ ແລະ ຄູ່ມືແນະນຳຂອງບົດສະເໜີແນວຄວາມຄິດລິເລີ່ມໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ.

**ມາດຕາ 23 ເງື່ອນໄຂບົດສະເໜີເບື້ອງຕົ້ນ ແລະ ບົດສະເໜີແນວຄວາມຄິດລິເລີ່ມ ຂອງໂຄງການລົງທຶນຮ່ວມ**

ບົດສະເໜີເບື້ອງຕົ້ນ ແລະ ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ຕ້ອງສອດ

ຄ່ອງກັບນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ແລະ ແຜນຍຸດທະສາດຂອງຂະແໜງການ.

ສໍາລັບ ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມຍັງຕ້ອງມີເງື່ອນໄຂເພີ່ມເຕີມດັ່ງນີ້:

1. ເປັນໂຄງການຕາມແນວຄວາມຄິດລິເລີ່ມໃໝ່ ຂອງຂະແໜງການ ຫຼື ພາກເອກະຊົນ;

2. ເປັນໂຄງການທີ່ມີຄວາມສໍາຄັນ, ນໍາໃຊ້ເຕັກໂນໂລຊີໃໝ່ ແລະ ນະວັດຕະກໍາສູງ, ມີຄວາມກຸ້ມຄ່າໃນການລົງທຶນ;

3. ມີຜົນຕອບແທນສູງ ແລະ ກວ້າງຂວາງ ທາງດ້ານເສດຖະກິດ-ສັງຄົມ;

4. ມີຂໍ້ມູນລະອຽດ ແລະ ພຽງພໍ ເພື່ອໃຫ້ສາມາດປະເມີນ ຫຼື ສືບຕໍ່ສ້າງບົດວິພາກເສດຖະກິດ-ເຕັກນິກລະອຽດຂອງໂຄງການ;

5. ຖ້າເປັນການສະເໜີໂດຍພາກເອກະຊົນ, ພາກເອກະຊົນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໂດຍບໍ່ຮຽກຮ້ອງການສະໜັບສະໜູນ ດ້ານການເງິນ ຫຼື ດ້ານນະໂຍບາຍດ້ານພາສີ, ອາກອນ ໃນການກະກຽມ ແລະ ດໍາເນີນໂຄງການ ລວມທັງຮັບຜິດຊອບຄວາມສ່ຽງທັງໝົດຂອງໂຄງການ.

## ມາດຕາ 24 ການສະເໜີ ແລະ ການພິຈາລະນາ ບົດສະເໜີເບື້ອງຕົ້ນໂຄງການລົງທຶນຮ່ວມ

ຂະແໜງການ ທີ່ມີຈຸດປະສົງພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ຊຶ່ງນອນໃນແຜນພັດທະນາຂອງຂະແໜງການ ໃຫ້ຍື່ນບົດສະເໜີເບື້ອງຕົ້ນຕໍ່ຫ້ອງການລົງທຶນຮ່ວມຂັ້ນສູນກາງ ເພື່ອຄົ້ນຄວ້າ ແລະ ສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມຂັ້ນສູນກາງ ພາຍໃນກໍານົດເວລາ ຊາວ ວັນລັດຖະການ ສໍາລັບການລົງທຶນໃນກິດຈະການທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໄດ້ກໍານົດໃຫ້ຂັ້ນສູນກາງຄຸ້ມຄອງ.

ສໍາລັບຂະແໜງການຂັ້ນແຂວງ ທີ່ມີຈຸດປະສົງພັດທະນາໂຄງການລົງທຶນຮ່ວມ ໃຫ້ຍື່ນບົດສະເໜີເບື້ອງຕົ້ນຕໍ່ຂະແໜງການສາຍຕັ້ງຂອງຕົນ, ໂດຍຜ່ານຄະນະນໍາຂັ້ນແຂວງ, ເພື່ອເອົາເຂົ້າໃນແຜນ ແລະ ສະເໜີລັດຖະບານພິຈາລະນາ ໂດຍຜ່ານຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ.

ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ຄົ້ນຄວ້າ ແລະ ພິຈາລະນາບົດສະເໜີເບື້ອງຕົ້ນໂຄງການລົງທຶນຮ່ວມ ຖ້າວ່າບົດສະເໜີດັ່ງກ່າວ ໄດ້ຖືກຮັບຮອງ ຫ້ອງການລົງທຶນຮ່ວມຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຂະແໜງການ ພາຍໃນກໍານົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນມີມະຕິກອງປະຊຸມຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ເພື່ອກະກຽມການສ້າງຮ່າງກອບໜ້າວຽກ ສໍາລັບການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແບບລະອຽດຂອງໂຄງການ ເພື່ອປະມູນເອົາບໍລິສັດ ມາສຶກສາສໍາຫຼວດໃນຂັ້ນຕໍ່ໄປ. ໃນກໍລະນີບໍ່ເຫັນດີ ກໍໃຫ້ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງພ້ອມດ້ວຍເຫດຜົນ.

## ມາດຕາ 25 ການສະເໜີ ແລະ ການພິຈາລະນາ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ

ຂະແໜງການ ຫຼື ພາກເອກະຊົນ ທີ່ມີຈຸດປະສົງພັດທະນາໂຄງການລົງທຶນຮ່ວມ ຊຶ່ງເປັນໂຄງການທີ່ມີແນວຄວາມຄິດລິເລີ່ມ ສາມາດຍື່ນບົດສະເໜີແນວຄວາມຄິດລິເລີ່ມ ພ້ອມດ້ວຍບົດວິພາກເສດຖະ

ກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການ ຕໍ່ຫ້ອງການລົງທຶນຮ່ວມຂັ້ນສູນກາງ ເພື່ອນໍາສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມຂັ້ນສູນກາງ ພາຍໃນກໍານົດເວລາ ສີ່ສິບຫ້າ ວັນລັດຖະການ ພາຍຫຼັງທີ່ມີຄໍາເຫັນຄົບຖ້ວນຈາກຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ.

ໃນກໍລະນີ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມຂັ້ນສູນກາງ ຫາກເຫັນວ່າ ບົດສະເໜີແນວຄວາມຄິດລິເລີ່ມ, ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມເບື້ອງຕົ້ນ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງແຜນການ ແລະ ການລົງທຶນນໍາສະເໜີລັດຖະບານພິຈາລະນາ. ພາຍຫຼັງລັດຖະບານພິຈາລະນາຮັບຮອງແລ້ວ ໃຫ້ຫ້ອງການລົງທຶນຮ່ວມແຈ້ງໃຫ້ພາກເອກະຊົນທີ່ກ່ຽວຂ້ອງ ເພື່ອເຊັນບົດບັນທຶກຄວາມເຂົ້າໃຈ ແລະ ສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແບບລະອຽດ ແລະ ສໍາລັບຂະແໜງການ ແມ່ນໃຫ້ກະກຽມການສ້າງຮ່າງກອບໜ້າວຽກ ສໍາລັບການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແບບລະອຽດຂອງໂຄງການ ເພື່ອປະມູນເອົາບໍລິສັດມາສຶກສາສໍາຫຼວດໃນຂັ້ນຕໍ່ໄປ. ໃນກໍລະນີບໍ່ເຫັນດີ ກໍໃຫ້ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງພ້ອມດ້ວຍເຫດຜົນ.

ພາກເອກະຊົນ ທີ່ໄດ້ຍື່ນບົດສະເໜີແນວຄວາມຄິດລິເລີ່ມນັ້ນ ຫຼື ບໍລິສັດທີ່ປຶກສາທີ່ໄດ້ຮັບການຄັດເລືອກໃຫ້ເປັນຜູ້ດໍາເນີນການສຶກສາຂອງຂະແໜງການ ຈະບໍ່ໄດ້ຮັບສິດໃນການເປັນຜູ້ພັດທະນາໂຄງການໂດຍກົງ ຊຶ່ງຕ້ອງຜ່ານການປະມູນ. ໃນກໍລະນີຜູ້ກ່ຽວ ຫາກບໍ່ຊະນະການປະມູນ ຈະໄດ້ຮັບການທົດແທນຄືນຄ່າໃຊ້ຈ່າຍໃນການກະກຽມບົດສະເໜີແນວຄວາມຄິດລິເລີ່ມຈາກຜູ້ຊະນະການປະມູນ ໂດຍຄ່າໃຊ້ຈ່າຍດັ່ງກ່າວ ຕ້ອງຖືກຄິດໄລ່ເປັນຕົ້ນທຶນຂອງໂຄງການ ແລະ ກໍານົດແຈ້ງໃນເອກະສານປະມູນ.

ໃນກໍລະນີ ຜູ້ສະເໜີແນວຄວາມຄິດລິເລີ່ມ ຫາກສະເໜີລາຄາປະມູນສູງກວ່າ ຈະໄດ້ຮັບນະໂຍບາຍ ດັ່ງນີ້:

- ຮັບສິດ ໃນການເຂົ້າຮ່ວມປະມູນຮອບສຸດທ້າຍ (Automatic Shortlisting);
- ຮັບໂບນັດ (Bonus) ສູງສຸດບໍ່ເກີນ 5% ຂອງລາຄາປະມູນ.

### ມາດຕາ 26 ບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການລົງທຶນຮ່ວມ

ບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການລົງທຶນຮ່ວມ ແມ່ນ ເອກະສານກ່ຽວກັບຮູບແບບ, ລັກສະນະ ແລະ ອາຍຸ ຂອງໂຄງການລົງທຶນທີ່ສະແດງໃຫ້ເຫັນຄວາມສອດຄ່ອງດ້ານເຕັກນິກ, ຜົນປະໂຫຍດດ້ານເສດຖະກິດ-ສັງຄົມ, ຄວາມກຸ້ມຄ່າໃນການລົງທຶນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຄວາມເປັນໄປໄດ້ດ້ານການເງິນ, ຮັບປະກັນເງື່ອນໄຂຂອງການລົງທຶນຮ່ວມຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 21 ຂອງດໍາລັດສະບັບນີ້ ລວມທັງການກໍານົດກ່ຽວກັບຄວາມຍືນຍົງຂອງໂຄງການ, ຜົນກະທົບທາງດ້ານສິ່ງແວດລ້ອມ, ບົດບາດຍິງ-ຊາຍ ໃນໂຄງການລົງທຶນຮ່ວມ.

ສໍາລັບ ບົດສະເໜີເບື້ອງຕົ້ນຂອງໂຄງການລົງທຶນຮ່ວມ ຂະແໜງການຕ້ອງເປັນເຈົ້າການເຮັດວຽກຮ່ວມກັບບໍລິສັດທີ່ປຶກສາທີ່ໄດ້ຮັບການຄັດເລືອກໃຫ້ເປັນຜູ້ດໍາເນີນການສຶກສາ, ສ່ວນບົດສະເໜີແນວຄວາມຄິດລິເລີ່ມຂອງໂຄງການລົງທຶນຮ່ວມ ພາກເອກະຊົນຕ້ອງດໍາເນີນການສຶກສາໂດຍກົງ, ຄວາມເປັນ

ໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ຄວາມເປັນໄປໄດ້ທາງດ້ານແຫຼ່ງທຶນ, ຜົນກະທົບທາງດ້ານສິ່ງແວດລ້ອມ ເພື່ອສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແບບລະອຽດ ໃຫ້ສຳເລັດພາຍໃນກຳນົດເວລາ ສິບແປດ ເດືອນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ແລ້ວສະເໜີຕໍ່ຫ້ອງການລົງທຶນຮ່ວມ.

**ມາດຕາ 27 ການພິຈາລະນາ ບົດວິພາກເສດຖະກິດ-ເຕັກນິກ ແບບລະອຽດ ຂອງໂຄງການລົງທຶນຮ່ວມ**

ຫ້ອງການລົງທຶນຮ່ວມ ເປັນຜູ້ຄົ້ນຄວ້າບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການ ລວມທັງບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແບບລະອຽດຂອງໂຄງການ ທີ່ສະເໜີໂດຍຂະແໜງການໂດຍການປະສານສົມທົບກັບຂະແໜງການກ່ຽວຂ້ອງ ຂັ້ນສູນກາງ, ຂັ້ນແຂວງ ແລະ ທີມງານທີ່ປຶກສາ ພາຍໃນກຳນົດເວລາ ເກົ້າສິບ ວັນລັດຖະການ ແລ້ວນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ພິຈາລະນາ ດັ່ງນີ້:

1. ຕົກລົງຮັບຮອງບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການ ແລ້ວສະເໜີລັດຖະບານ ພິຈາລະນາ ແລະ ສະພາແຫ່ງຊາດ ຕາມແຕ່ລະກໍລະນີ ຕາມຂັ້ນຕອນຂອງກົດໝາຍ ພ້ອມທັງແຈ້ງໃຫ້ຂະແໜງການກະກຽມເອກະສານປະມູນ ໃນກໍລະນີເຫັນດີ;

2. ສະເໜີ ຂະແໜງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ປັບປຸງ ແລະ ແກ້ໄຂ ບົດວິພາກເສດຖະກິດ-ເຕັກນິກ ແບບລະອຽດຂອງໂຄງການພາຍໃນກຳນົດເວລາ ຫົກສິບ ວັນລັດຖະການ;

3. ປະຕິເສດການຮັບຮອງເອົາບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການ.

ກໍລະນີ ຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການມີປະສິດທິຜົນ ຫຼື ມີຜົນປະໂຫຍດກວ້າງຂວາງຕໍ່ສັງຄົມ ຄວນມີການປະກອບສ່ວນທຶນ ຕາມມາດຕາ 8 ແລະ/ຫຼື ຈຳເປັນຕ້ອງມີການສະໜັບສະໜູນດ້ານການເງິນ ຕາມມາດຕາ 46 ຂອງດຳລັດສະບັບນີ້, ກ່ອນຈະນຳສະເໜີໂຄງການດັ່ງກ່າວ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມພິຈາລະນາ, ຫ້ອງການລົງທຶນຮ່ວມ ຕ້ອງສະເໜີໂຄງການດັ່ງກ່າວ ຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ.

**ມາດຕາ 28 ການແບ່ງຂັ້ນພິຈາລະນາ, ອະນຸມັດ ແລະ ຮັບຮອງ ໂຄງການລົງທຶນຮ່ວມ**

ການແບ່ງຂັ້ນພິຈາລະນາ, ອະນຸມັດ ແລະ ຮັບຮອງ ໂຄງການລົງທຶນຮ່ວມ ປະຕິບັດ ດັ່ງນີ້:

**1. ສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງ ໃນກໍລະນີ ຄື:**

- ໂຄງການລົງທຶນຮ່ວມ ທີ່ມູນຄ່າການລົງທຶນເກີນ ສາມຮ້ອຍ ລ້ານໂດລາສະຫະລັດ;
- ໂຄງການລົງທຶນຮ່ວມ ທີ່ມີທຶນສົມທົບຂອງລັດ ເທົ່າກັບ ຫຼື ຫຼາຍກວ່າ ຊາວ ຕື້ກີບ ຂຶ້ນໄປ;
- ໂຄງການກໍ່ສ້າງໂຮງງານພະລັງງານນິວເຄຼຍ;
- ກິດຈະການທີ່ພົວພັນກັບການຫັນປ່ຽນປ່າສະຫງວນ ແລະ ປ່າປ້ອງກັນແຫ່ງຊາດ;
- ກິດຈະການທີ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ເປັນຕົ້ນ ການຫັນປ່ຽນແລວນ້ຳທຳມະຊາດ, ການຍົກຍ້າຍຈັດສັນປະຊາຊົນ ແຕ່ ຫ້າຮ້ອຍ ຄອບຄົວ ຂຶ້ນໄປ, ການສຳປະທານທີ່ດິນ ແຕ່ ສິບພັນ ເຮັກຕາ ຂຶ້ນໄປ ແລະ ກິດຈະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

- ໂຄງການທີ່ຕ້ອງການໃຫ້ມີນະໂຍບາຍສົ່ງເສີມພິເສດ.

ການພິຈາລະນາ ແລະ ຮັບຮອງ ໂຄງການລົງທຶນຮ່ວມ ແມ່ນໃຫ້ມີມະຕິຕົກລົງຂອງສະພາແຫ່ງຊາດເຫັນດີເປັນລາຍລັກອັກສອນ.

**2. ສະພາປະຊາຊົນຂັ້ນແຂວງ ພິຈາລະນາ ແລະ ຮັບຮອງ ໃນກໍລະນີ ຄື:**

- ໂຄງການລົງທຶນຮ່ວມທີ່ມີທຶນສົມທົບຂອງລັດ ໜ້ອຍກວ່າ ຊາວ ຕື້ກີບ;
- ຫັນປ່ຽນທີ່ດິນປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູຄືນເອງໄດ້ ແຕ່ ໜຶ່ງຮ້ອຍ ເຮັກຕາ ລົງມາ ຕາມການສະເໜີຂອງອົງການປົກຄອງແຂວງ, ນະຄອນຫຼວງ;
- ຫັນປ່ຽນທີ່ດິນປ່າປອກໂຫຼ້ນ ແຕ່ ສາມສິບ ຫາ ສອງຮ້ອຍ ເຮັກຕາ ຕໍ່ໜຶ່ງກິດຈະການ ຕາມການສະເໜີຂອງອົງການປົກຄອງແຂວງ, ນະຄອນຫຼວງ;
- ການເຊົ່າ ຫຼື ສຳປະທານທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນເອງ ແຕ່ ໜຶ່ງຮ້ອຍຫ້າສິບ ເຮັກຕາ ລົງມາຕໍ່ໜຶ່ງກິດຈະການ ແລະ ກຳນົດເວລາ ເຊົ່າ ຫຼື ສຳປະທານສູງສຸດບໍ່ເກີນ ສາມສິບ ປີ ຕາມການສະເໜີຂອງອົງການປົກຄອງແຂວງ, ນະຄອນຫຼວງ;
- ກິດຈະການທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ໃນລະດັບແຂວງ, ນະຄອນຫຼວງ.

ການພິຈາລະນາ ແລະ ຮັບຮອງ ໂຄງການລົງທຶນຮ່ວມ ແມ່ນໃຫ້ມີມະຕິຕົກລົງຂອງສະພາປະຊາຊົນຂັ້ນແຂວງເຫັນດີເປັນລາຍລັກອັກສອນ.

**3. ລັດຖະບານພິຈາລະນາ, ອະນຸມັດ ແລະ ຮັບຮອງ ໃນກໍລະນີ ຄື:**

- ໂຄງການບໍ່ມີການປະກອບທຶນຂອງລັດ;
- ໂຄງການບໍ່ມີການຫັນປ່ຽນປ່າສະຫງວນ ແລະ ປ່າປ້ອງກັນ ແຫ່ງຊາດ;
- ໂຄງການທີ່ບໍ່ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ການຍົກຍ້າຍຈັດສັນປະຊາຊົນ ບໍ່ເກີນ ຫ້າຮ້ອຍ ຄອບຄົວ;
- ໂຄງການລົງທຶນຮ່ວມ ທີ່ມູນຄ່າການລົງທຶນບໍ່ເກີນ ສາມຮ້ອຍ ລ້ານໂດລາສະຫະລັດ;
- ໂຄງການອື່ນ ທີ່ບໍ່ຂໍເກີນສິດອະນຸຍາດຕາມທີ່ກົດໝາຍກຳນົດ.

ນອກຈາກ ໂຄງການ ຫຼື ບັນຫາ ທີ່ໄດ້ກ່າວມາຂ້າງເທິງນີ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

## ໝວດທີ 2
## ການປະມູນໂຄງການ

### ມາດຕາ 29 ການປະມູນໂຄງການລົງທຶນຮ່ວມ

ການປະມູນໂຄງການລົງທຶນຮ່ວມ ແມ່ນການແຂ່ງຂັນທາງດ້ານລາຄາ ແລະ ຄຸນນະພາບ ເພື່ອຄັດເລືອກເອົາທີ່ປຶກສາ ແລະ ຜູ້ປະມູນ ທີ່ມີເງື່ອນໄຂດີທີ່ສຸດ ເພື່ອເປັນຄູ່ສັນຍາໂຄງການລົງທຶນຮ່ວມ ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ໄລຍະພັດທະນາໂຄງການລົງທຶນຮ່ວມຕາມມາດຖານ ແລະ ເງື່ອນໄຂ ທີ່ກຳນົດໂດຍຂະແໜງການ.

ຫ້ອງການລົງທຶນຮ່ວມ ຕ້ອງແຈ້ງກ່ຽວກັບການເປີດການປະມູນໂຄງການຢ່າງເປີດເຜີຍ ໂດຍຜ່ານພາຫະນະສື່ມວນຊົນຕ່າງໆ ພາຍໃນກຳນົດເວລາ ສາມ ວັນລັດຖະການ ນັບແຕ່ວັນ ສຳເລັດເອກະສານການປະມູນ ແລະ ຮັກສາການແຈ້ງການທີ່ລົງໃນສື່ມວນຊົນດັ່ງກ່າວໄວ້ ພາຍໃນກຳນົດເວລາ ເຈັດ ວັນລັດຖະການ.

ສຳລັບການປະມູນໂຄງການລົງທຶນຮ່ວມ ທີ່ໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ, ຍົກເວັ້ນກໍລະນີຜູ້ໃຫ້ທຶນໄດ້ກຳນົດລະບຽບການ ແລະ ຂັ້ນຕອນດຳເນີນການປະມູນໄວ້ຕ່າງຫາກ ແຕ່ເຈົ້າຂອງໂຄງການຕ້ອງແຈ້ງໃຫ້ຫ້ອງການລົງທຶນຮ່ວມຊາບ.

**ມາດຕາ 30 ຫຼັກການ ການປະມູນໂຄງການລົງທຶນຮ່ວມ**

ການປະມູນໂຄງການລົງທຶນຮ່ວມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ;

2. ເປີດກວ້າງການແຂ່ງຂັນການປະມູນ, ສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

3. ບໍ່ສ້າງເງື່ອນໄຂ ຫຼື ຂໍ້ຈຳກັດເພີ່ມເຕີມ ທີ່ຈະເປັນການຂັດຂວາງ ຫຼື ເປັນອຸປະສັກ ໃຫ້ແກ່ຜູ້ເຂົ້າຮ່ວມການປະມູນ.

**ມາດຕາ 31 ເອກະສານການປະມູນ**

ເອກະສານການປະມູນມີ ດັ່ງນີ້:

1. ແຜນລະອຽດຂອງຂະບວນການປະມູນທີ່ຕ້ອງປະຕິບັດ;

2. ໜັງສືເຈດຈຳນົງ ລວມທັງເງື່ອນໄຂເບື້ອງຕົ້ນ, ຄຳແນະນຳສຳລັບຜູ້ເຂົ້າຮ່ວມການປະມູນ ແລະ ຫຼັກການໃນການປະເມີນ;

3. ຮ່າງສັນຍາການລົງທຶນຮ່ວມ;

4. ບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການ;

5. ເອກະສານກ່ຽວກັບການສະໜັບສະໜູນຂອງລັດຖະບານ (ຖ້າມີ);

6. ເອກະສານຄັດຕິດທາງດ້ານເຕັກນິກທີ່ກ່ຽວຂ້ອງ.

ຂະແໜງການຕ້ອງປະສານສົມທົບກັບຫ້ອງການລົງທຶນຮ່ວມ ເພື່ອກະກຽມເອກະສານການປະມູນຕາມ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການຖືກຮັບຮອງເປັນຕົ້ນໄປ.

ຫ້ອງການລົງທຶນຮ່ວມຕ້ອງກວດກາເອກະສານການປະມູນໃຫ້ສຳເລັດ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານການປະມູນເປັນຕົ້ນໄປ. ໃນກໍລະນີເອກະສານການປະມູນຫາກບໍ່ຄົບຖ້ວນ ແລະ ຖືກຕ້ອງ ຫ້ອງການລົງທຶນຮ່ວມຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ປັບປຸງເອກະສານການປະມູນຄືນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

**ມາດຕາ 32 ການຄັດເລືອກຜູ້ປະມູນທີ່ມີເງື່ອນໄຂດີທີ່ສຸດ**

ການຄັດເລືອກຜູ້ປະມູນທີ່ມີເງື່ອນໄຂດີທີ່ສຸດ ສໍາລັບໂຄງການລົງທຶນຮ່ວມ ໃຫ້ປະຕິບັດຕາມລໍາດັບ ດັ່ງນີ້:

1. ພິຈາລະນາຜູ້ປະມູນທີ່ມີເງື່ອນໄຂຄົບຖ້ວນ;

2. ພິຈາລະນາທາງດ້ານມາດຕະຖານ-ເຕັກນິກ;

3. ພິຈາລະນາເງື່ອນໄຂດ້ານລາຄາ.

ລາຍລະອຽດກ່ຽວກັບ ການຄັດເລືອກຜູ້ຊະນະການປະມູນ ແລະ ຂັ້ນຕອນການປະມູນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 ຄະນະກໍາມະການປະມູນ**

ຄະນະກໍາມະການປະມູນ ໄດ້ຮັບການແຕ່ງຕັ້ງໂດຍ ປະທານຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ, ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ມີພາລະບົດບາດເປັນເສນາທິການໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການປະມູນ ຕາມວິທີການ ແລະ ຂັ້ນຕອນ ທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຄະນະກໍາມະການປະມູນ ປະກອບດ້ວຍ ຜູ້ຕາງໜ້າຈາກ:

1. ຂະແໜງການ ການເງິນ ໜຶ່ງ ທ່ານ;

2. ຂະແໜງການ ແຜນການ ແລະ ການລົງທຶນ ຊຶ່ງປະກອບດ້ວຍ ຫ້ອງການລົງທຶນຮ່ວມ ແລະ ກົມກ່ຽວຂ້ອງ;

3. ຂະແໜງການ ໜຶ່ງ ຫາ ສາມ ທ່ານ;

4. ທີ່ປຶກສາອາວຸໂສທາງດ້ານເຕັກນິກ-ວິຊາການ ທີ່ກ່ຽວຂ້ອງ ໜຶ່ງ ຫາ ສາມ ທ່ານ;

ໃນກໍລະນີຈໍາເປັນ ກໍສາມາດສະເໜີແຕ່ງຕັ້ງຜູ້ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງຕື່ມ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງຄະນະກໍາມະການປະມູນ**

ຄະນະກໍາມະການປະມູນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດຄວາມຕ້ອງການ ແລະ ເງື່ອນໄຂ ຂອງການປະມູນ, ກວດກາເອກະສານການປະມູນແລ້ວ ນໍາສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ພິຈາລະນາ;

2. ດໍາເນີນການປະມູນ, ເປີດຊອງເອກະສານການປະມູນ ແລະ ປະເມີນເອກະສານການປະມູນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ລາຍງານຜົນຂອງການປະເມີນເອກະສານການປະມູນ ແລະ ຜົນການປະມູນ ຕໍ່ລັດຖະບານພິຈາລະນາໂດຍຜ່ານຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການປະເມີນເອກະສານການປະມູນ ໃຫ້ອີງໃສ່ເງື່ອນໄຂທາງດ້ານການເງິນ, ເສດຖະກິດ-ເຕັກນິກ,ສິ່ງແວດລ້ອມ ລວມທັງບົດບາດຍິງ-ຊາຍ.

## ພາກທີ IV
## ສັນຍາການລົງທຶນຮ່ວມ

### ມາດຕາ 35 ສັນຍາການລົງທຶນຮ່ວມ

ສັນຍາການລົງທຶນຮ່ວມ ແມ່ນ ການຕົກລົງ ລະຫວ່າງ ຂະແໜງການແຜນການ ແລະ ການລົງທຶນຕາງໜ້າໃຫ້ພາກລັດ ກັບ ພາກເອກະຊົນ ທີ່ຊະນະການປະມູນ ໃຫ້ເປັນຜູ້ພັດທະນາໂຄງການ ຊຶ່ງຕາງໜ້າໂດຍບໍລິສັດໂຄງການລົງທຶນຮ່ວມ ທີ່ໄດ້ຮັບອະນຸຍາດລົງທຶນ ເພື່ອໃຫ້ເກີດສິດ ແລະ ພັນທະ ໃນການພັດທະນາໂຄງການໃດໜຶ່ງ ພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ເງື່ອນໄຂສະເພາະຕາມສັນຍາ.

### ມາດຕາ 36 ເນື້ອໃນຂອງສັນຍາການລົງທຶນຮ່ວມ

ສັນຍາການລົງທຶນຮ່ວມ ຕ້ອງກຳນົດເນື້ອໃນຊັດເຈນ, ຈະແຈ້ງ ແລະ ຮັດກຸມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ເນື້ອໃນພື້ນຖານ ຂອງສັນຍາການລົງທຶນຮ່ວມ ມີ ດັ່ງນີ້:

1. ຂອບເຂດ ແລະ ໜ້າວຽກຂອງໂຄງການ;
2. ຄວາມຮັບຜິດຊອບຂອງຄູ່ສັນຍາ ແລະ ເຈົ້າຂອງໂຄງການ;
3. ຄວາມຮັບຜິດຊອບຕໍ່ຄວາມສ່ຽງຂອງໂຄງການຂອງຄູ່ສັນຍາ ແຕ່ລະຝ່າຍ;
4. ການປະຕິບັດພັນທະ ດ້ານພາສີ, ອາກອນ ຂອງພາກເອກະຊົນ;
5. ຜົນປະໂຫຍດທາງກົງ ແລະ ທາງອ້ອມ ຂອງລັດຖະບານ;
6. ການນຳໃຊ້ທີ່ດິນ, ການເຂົ້າໄປໃນພື້ນທີ່ໂຄງການ ແລະ ການນຳໃຊ້ສິ່ງອຳນວຍຄວາມສະດວກຕ່າງໆໃນພື້ນທີ່ໂຄງການ;
7. ໄລຍະເວລາກໍ່ສ້າງ, ວັນເລີ່ມດຳເນີນງານ, ດຳເນີນທຸລະກິດ ແລະ ບຳລຸງຮັກສາ;
8. ມາດຕະຖານໃນການປະຕິບັດງານດ້ານເຕັກນິກ, ຄຸນນະພາບ ແລະ ຄວາມປອດໄພ;
9. ການເງິນ, ການບັນຊີ, ການກວດສອບອິດສະຫຼະ, ການຄໍ້າປະກັນ, ການຊຳລະສະສາງ ແລະ ມາດຕະການປັບໃໝ ໃນກໍລະນີທີ່ບໍລິສັດໂຄງການບໍ່ສາມາດປະຕິບັດ ຕາມມາດຕະຖານທີ່ໄດ້ຕົກລົງກັນໄວ້ໃນສັນຍາ;
10. ການທົບທວນ ແລະ ດັດແກ້ຫົວໜ່ວຍລາຄາ;
11. ສິດແຊກແຊງເຂົ້າໃນໂຄງການຂອງລັດຖະບານ ແລະ ຜູ້ສະໜອງທຶນ ໃນກໍລະນີໂຄງການມີບັນຫາ;
12. ການທົບທວນຄືນ, ການປັບປຸງ ຫຼື ປ່ຽນແປງ ເນື້ອໃນສັນຍາ;

13. ການປ່ຽນແປງເງື່ອນໄຂຂອງ ຂອບເຂດ ແລະ ໜ້າວຽກ ລວມທັງການປັບປຸງເຕັກໂນໂລຊີທີ່ນໍາໃຊ້ໃນການພັດທະນາໂຄງການ;

14. ການຕິດຕາມກວດກາ ແລະ ການລາຍງານ;

15. ການວາງແຜນຄ່າໃຊ້ຈ່າຍບັງເອີນ;

16. ການແກ້ໄຂຂໍ້ຂັດແຍ່ງ;

17. ອາຍຸສັນຍາ ຕ້ອງອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ເງື່ອນໄຂ ແລະ ລັກສະນະຈຸດພິເສດສະເພາະຂອງໂຄງການລົງທຶນຮ່ວມ;

18. ບັນດາກົດໝາຍທີ່ຄຸ້ມຄອງ ແລະ ບັງຄັບໃຊ້;

19. ການຄຸ້ມຄອງໂຄງການ.

ນອກຈາກເນື້ອໃນພື້ນຖານທີ່ໄດ້ກໍານົດໄວ້ໃນມາດຕານີ້ ຖ້າມີຄວາມຈໍາເປັນ ຄູ່ສັນຍາສາມາດຕົກລົງກັນກ່ຽວກັບເນື້ອໃນສະເພາະໃດໜຶ່ງຕື່ມອີກກໍໄດ້ ແຕ່ຕ້ອງສອດຄ່ອງກັບ ດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 37 ຂັ້ນຕອນການພິຈາລະນາສັນຍາ**

ການພິຈາລະນາສັນຍາ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຫຼັງຈາກລັດຖະບານ ມີແຈ້ງການ ເຫັນດີໃຫ້ເຈລະຈາສັນຍາ ແລະ ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ຂັ້ນແຂວງ ເພື່ອປຶກສາຫາລື ແລະ ເຈລະຈາ ກັບພາກເອກະຊົນທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການກ່ຽວກັບເນື້ອໃນຮ່າງສັນຍາ ໃຫ້ສໍາເລັດພາຍໃນກໍານົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນໄດ້ແຈ້ງຜົນການປະມູນເປັນຕົ້ນໄປ;

2. ຫ້ອງການລົງທຶນຮ່ວມ ນໍາສະເໜີຮ່າງສັນຍາ ພ້ອມດ້ວຍລາຍລະອຽດຂອງໂຄງການ ຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ເພື່ອພິຈາລະນາ.

ໃນກໍລະນີຈໍາເປັນຕ້ອງປັບປຸງເນື້ອໃນຮ່າງສັນຍາ ໃຫ້ກະຊວງແຜນການ ແລະ ການລົງທຶນປະສານສົມທົບກັບຂະແໜງການ ແລະ ພາກເອກະຊົນທີ່ກ່ຽວຂ້ອງ ທົບທວນ, ປັບປຸງ ໃຫ້ສໍາເລັດ ຕາມກໍານົດເວລາທີ່ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ກໍານົດ.

**ມາດຕາ 38 ຂັ້ນຕອນການເຊັນສັນຍາ**

ການເຊັນສັນຍາ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ລາຍງານລັດຖະບານ ເພື່ອຂໍອະນຸມັດ ເຊັນສັນຍາ;

2. ຫ້ອງການລົງທຶນຮ່ວມ ແຈ້ງເປັນລາຍລັກອັກສອນໃຫ້ຂະແໜງການ ແລະ ພາກເອກະຊົນ ທີ່ໄດ້ຜ່ານການຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ພາຍໃນກໍານົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນ ລັດຖະບານ ອະນຸມັດໃຫ້ເຊັນສັນຍາ;

3. ກະຊວງແຜນການ ແລະ ການລົງທຶນ ອອກອະນຸຍາດ ສ້າງຕັ້ງບໍລິສັດໂຄງການລົງທຶນຮ່ວມພາຍໃນກໍານົດເວລາ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ;

4. ກະຊວງແຜນການ ແລະ ການລົງທຶນ ຕາງໜ້າໃຫ້ລັດຖະບານ ເຊັນສັນຍາກັບເຈົ້າຂອງໂຄງການ ແລະ ພາກເອກະຊົນ ທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ຊຶ່ງຕາງໜ້າໂດຍບໍລິສັດໂຄງການລົງທຶນຮ່ວມ ພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນອະນຸມັດໃຫ້ເຊັນສັນຍາ.

ໃນກໍລະນີພາກເອກະຊົນທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ບໍ່ມາເຊັນສັນຍາ ຕາມກຳນົດເວລາໂດຍບໍ່ມີເຫດຜົນພຽງພໍ ຈະຖືວ່າ ເປັນການສະລະສິດ ໂດຍບໍ່ມີສິດຮຽກຮ້ອງໃດໆ ຈາກພາກລັດ.

**ມາດຕາ 39 ການປ່ຽນແປງ ຫຼື ດັດແກ້ ສັນຍາການລົງທຶນຮ່ວມ**

ການປ່ຽນແປງ ຫຼື ດັດແກ້ ສັນຍາ ແມ່ນການປ່ຽນແປງເນື້ອໃນສັນຍາທີ່ໄດ້ເຊັນກັນບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ ໂດຍສອດຄ່ອງກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ການປ່ຽນແປງ ຫຼື ດັດແກ້ ເນື້ອໃນຂອງສັນຍາ ທີ່ມີຜົນກະທົບຕໍ່ປະສິດທິພາບ ແລະ ປະສິດທິຜົນຂອງໂຄງການ, ຄວາມຮັບຜິດຊອບຕໍ່ຄວາມສ່ຽງຂອງແຕ່ລະຝ່າຍ ຫຼື ມີຜົນກະທົບໂດຍກົງ, ທາງອ້ອມຕໍ່ງົບປະມານ, ການຊຳລະ, ການຄ້ຳປະກັນ ຫຼື ຕໍ່ຄວາມຮັບຜິດຊອບອື່ນທີ່ກ່ຽວຂ້ອງ ຂອງພາກລັດໃຫ້ສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາ ໂດຍຜ່ານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ.

ສ່ວນກໍລະນີການປ່ຽນແປງ ຫຼື ດັດແກ້ ເນື້ອໃນສັນຍາທີ່ບໍ່ມີຜົນກະທົບ ຕາມທີ່ໄດ້ກຳນົດໄວ້ໃນວັກສອງຂອງມາດຕານີ້ ໃຫ້ສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ເພື່ອພິຈາລະນາ.

## ພາກທີ V
## ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ
### ໝວດທີ 1
### ຜູ້ຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ

**ມາດຕາ 40 ຜູ້ຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ**

ຜູ້ຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ປະກອບດ້ວຍ ຂະແໜງການ ແລະ ພາກເອກະຊົນ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງຂະແໜງການ**

ໃນການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ຂະແໜງການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດ ແລະ ສ້າງແຜນໂຄງການລົງທຶນຮ່ວມເບື້ອງຕົ້ນໃຫ້ສຳເລັດ ກ່ອນວັນທີ 25 ມິຖຸນາ ຂອງທຸກປີ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແຕ່ລະໄລຍະ ແລ້ວສົ່ງໄປ

ຍັງຫ້ອງການລົງທຶນຮ່ວມ ເພື່ອຄົ້ນຄວ້າ ແລະ ສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ພິຈາລະນາບັນຈຸເຂົ້າໃນແຜນ ຫ້າ ປີ ແລະ ແຜນປະຈຳປີ ຂອງການລົງທຶນຮ່ວມ;

2. ສະເໜີຂໍການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສະໜັບສະໜູນທາງດ້ານການເງິນ ສຳລັບການກະກຽມໂຄງການລົງທຶນຮ່ວມ ຈາກລັດຖະບານ ເພື່ອສ້າງບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ພ້ອມທັງສະໜອງແຜນຄາດຄະເນລາຍຈ່າຍໃນການກະກຽມໂຄງການນັ້ນ ໃຫ້ແກ່ຫ້ອງການລົງທຶນຮ່ວມ ພາຍຫຼັງທີ່ໄດ້ຮັບການເຫັນດີດ້ານຫຼັກການ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ;

3. ສະໜອງຂໍ້ມູນ ຂ່າວສານ ທີ່ຈຳເປັນ ເພື່ອນຳໃຊ້ເຂົ້າໃນການສຶກສາຄວາມເປັນໄປໄດ້ຂອງໂຄງການລົງທຶນຮ່ວມແບບລະອຽດ ເຊັ່ນ: ບົດວິພາກເສດຖະກິດ-ເຕັກນິກ, ບົດສຶກສາຜົນກະທົບດ້ານສິ່ງແວດລ້ອມເບື້ອງຕົ້ນ ແລະ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງອື່ນ ໃຫ້ແກ່ຜູ້ທີ່ສົນໃຈ ແລະ ໄດ້ຮັບສິດຈາກລັດຖະບານໃຫ້ສຶກສາຄວາມເປັນໄປໄດ້ໃນການພັດທະນາໂຄງການລົງທຶນຮ່ວມແບບລະອຽດ;

4. ປະສານສົມທົບກັບຫ້ອງການລົງທຶນຮ່ວມໃນການກະກຽມ ແລະ ດຳເນີນການປະມູນໂຄງການ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

5. ວ່າຈ້າງຜູ້ຊ່ຽວຊານ ຫຼື ທີ່ປຶກສາ ເພື່ອສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ຂອງໂຄງການລົງທຶນຮ່ວມ;

6. ແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ເພື່ອເຂົ້າຮ່ວມຢູ່ໃນຄະນະກຳມະການປະມູນໂຄງການ;

7. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຮ່ວມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຂັ້ນຮອງຫົວໜ້າກົມ ຫຼື ທຽບເທົ່າ ຂຶ້ນໄປ ເປັນຫົວໜ້າຄະນະ ສຳລັບ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ; ຫົວໜ້າພະແນກການ ຫຼື ທຽບເທົ່າ ຂຶ້ນໄປ ເປັນຫົວໜ້າຄະນະ ສຳລັບ ແຂວງ, ນະຄອນຫຼວງ;

8. ສ້າງລະບົບຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດສັນຍາທີ່ໄດ້ເຊັນແລ້ວ ໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບຂອບໜ້າວຽກທີ່ຖືກຮັບຮອງແລ້ວ;

9. ຕິດຕາມ, ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໂດຍຜ່ານຫ້ອງການລົງທຶນຮ່ວມຢ່າງເປັນປົກກະຕິ;

10. ສະເໜີ ໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ຕໍ່ລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງໂດຍຜ່ານຫ້ອງການລົງທຶນຮ່ວມ ໃນກໍລະນີມີການລະເມີດສັນຍາ ແລະ ມີການເຄື່ອນໄຫວທີ່ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ສະເໜີແຜນງົບປະມານຊຳລະໂຄງການ ຕາມແຕ່ລະຮູບແບບຂອງການລົງທຶນຮ່ວມ ຕໍ່ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍຜ່ານຫ້ອງການລົງທຶນຮ່ວມ ໃນກໍລະນີມີການສະໜັບສະໜູນດ້ານການເງິນຈາກລັດຖະບານ ຊຶ່ງແຜນງົບປະມານດັ່ງກ່າວ ຕ້ອງປະກອບດ້ວຍ:

- ຕາຕະລາງການຊໍາລະເງິນໂດຍກົງ, ການຄໍ້າປະກັນ ຫຼື ພັນທະດ້ານການເງິນ, ພາສີ, ອາກອນ ຂອງເຈົ້າຂອງໂຄງການ ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດສັນຍາໂຄງການ.

12. ແຜນລາຍຈ່າຍປະຈໍາປີຂອງເຈົ້າຂອງໂຄງການ ສໍາລັບແຜນງົບປະມານການຊໍາລະໂດຍກົງ, ການຄໍ້າປະກັນ ຫຼື ພັນທະທາງດ້ານ ການເງິນ, ພາສີ, ອາກອນ ຂອງເຈົ້າຂອງໂຄງການ ຕາມລໍາດັບບຸລິມະສິດ ເພື່ອນໍາສະເໜີລັດຖະບານພິຈາລະນາ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ພັນທະ ຂອງພາກເອກະຊົນ**

ໃນການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມພາກເອກະຊົນ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສະເໜີແນວຄວາມຄິດລິເລີ່ມໂຄງການລົງທຶນຮ່ວມ, ເຂົ້າຮ່ວມຂະບວນການປະມູນ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້;

2. ສ້າງຕັ້ງບໍລິສັດໂຄງການລົງທຶນຮ່ວມ ແລະ ໄດ້ຮັບແຈ້ງການເຫັນດີກ່ຽວກັບການເຊັນສັນຍາ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້;

3. ເປີດບັນຊີຢູ່ທະນາຄານທຸລະກິດ ໃດໜຶ່ງທີ່ຕັ້ງ ຢູ່ ສປປ ລາວ, ນໍາເຂົ້າທຶນ, ໂອນລາຍໄດ້, ກໍາໄລ ແລະ ເງິນປັນຜົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ທົດແທນຄືນຄ່າໃຊ້ຈ່າຍຂອງພາກລັດ ໃນການປະກອບຂໍ້ມູນ ຂ່າວສານ ທີ່ຈໍາເປັນ ທີ່ພາກລັດມີ ແລະ ໄດ້ລົງທຶນກ່ອນ ເປັນຕົ້ນ: ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ເບື້ອງຕົ້ນ ແລະ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງອື່ນຂອງໂຄງການ; ຫຼື ທົດແທນຄືນຄ່າໃຊ້ຈ່າຍທັງໝົດໃນການສຶກສາຄວາມເປັນໄປໄດ້ຂອງໂຄງການແບບລະອຽດ, ໃນກໍລະນີ ພາກເອກະຊົນໄດ້ຮັບຄັດເລືອກໃຫ້ເປັນຜູ້ຊະນະການປະມູນ ແລະ ສິດໃນການພັດທະນາໂຄງການລົງທຶນຮ່ວມ;

5. ໄດ້ຮັບການທົດແທນຄືນຄ່າໃຊ້ຈ່າຍ ໂດຍຜູ້ຊະນະການປະມູນ ສໍາລັບຂໍ້ມູນ ຂ່າວສານທັງໝົດທີ່ຕິດພັນກັບໂຄງການ ເປັນຕົ້ນ: ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແບບລະອຽດ, ແຜນຜັງ, ການອອກແບບ ແລະ ເອກະສານທີ່ກ່ຽວຂ້ອງອື່ນ, ຖ້າເປັນໂຄງການລິເລີ້ມ ທີ່ພາກເອກະຊົນໄດ້ລົງທຶນກ່ອນ, ແຕ່ບໍ່ໄດ້ຮັບການຄັດເລືອກໃຫ້ເປັນຜູ້ຊະນະການປະມູນ;

6. ປະກອບທຶນເຂົ້າໃນການພັດທະນາໂຄງການລົງທຶນຮ່ວມ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ;

7. ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງບໍລິຫານໂຄງການລົງທຶນຮ່ວມໃຫ້ມີປະສິດທິພາບ ແລະ ປະສິດທິຜົນຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນເອກະສານການປະມູນ ແລະ ສັນຍາ;

8. ສ້າງລະບົບ ແລະ ກົນໄກທີ່ງ່າຍດາຍ ແລະ ມີປະສິດທິພາບ ເພື່ອຕິດຕາມ ແລະ ແກ້ໄຂຄໍາຮ້ອງຄໍາສະເໜີ ຂອງຜູ້ຊົມໃຊ້ ແລະ ບຸກຄົນອື່ນທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນຮ່ວມ;

9. ຕິດຕາມ, ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ໃຫ້ແກ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໂດຍ

ຜ່ານຫ້ອງການລົງທຶນຮ່ວມ ແລະ ເຈົ້າຂອງໂຄງການ ປະຈຳ ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ;

10. ສະເໜີ ໂຈະ ຫຼື ຍົກເລີກ ໂຄງການລົງທຶນຮ່ວມ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

11. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ, ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຮ່ວມນັບແຕ່ຂັ້ນຕອນການປະມູນຈົນຮອດໄລຍະສິ້ນສຸດການລົງທຶນຮ່ວມ;

12. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການສະໜັບສະໜູນຂອງພາກລັດ

### ມາດຕາ 43 ການສະໜັບສະໜູນຂອງພາກລັດ

ການສະໜັບສະໜູນຂອງພາກລັດໃນການລົງທຶນຮ່ວມ ມີ ດັ່ງນີ້:

1. ການສະໜັບສະໜູນດ້ານນິຕິກຳ;
2. ການສະໜັບສະໜູນດ້ານການເງິນ;
3. ການສະໜັບສະໜູນດ້ານນະໂຍບາຍສົ່ງເສີມ.

### ມາດຕາ 44 ການສະໜັບສະໜູນດ້ານນິຕິກຳ

ການສະໜັບສະໜູນດ້ານນິຕິກຳ ແມ່ນການຮັບປະກັນ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ດ້ວຍການປັບປຸງ ຫຼື ສ້າງນິຕິກຳ ຕາມແຕ່ກໍລະນີ ທີ່ເຫັນວ່າມີຄວາມຈຳເປັນໃນການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໃຫ້ມີປະສິດທິຜາບ.

ການປັບປຸງ ຫຼື ການສ້າງນິຕິກຳດັ່ງກ່າວ ຕ້ອງບໍ່ຂັດກັບນິຕິກຳອື່ນທີ່ມີແລ້ວ, ພ້ອມທັງຮັບປະກັນການ ປະຕິບັດສິດ ແລະ ພັນທະຂອງຜູ້ລົງທຶນຮ່ວມ ແລະ ນຳຜົນປະໂຫຍດມາສູ່ສັງຄົມ.

### ມາດຕາ 45 ການສະໜັບສະໜູນດ້ານການເງິນ

ການສະໜັບສະໜູນດ້ານການເງິນ ແມ່ນການສະໜອງງົບປະມານເຂົ້າໃນການພັດທະນາໂຄງການລົງທຶນຮ່ວມ, ການອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂ ໃຫ້ຂະແໜງການກ່ຽວຂ້ອງ ຫຼື ພາກເອກະຊົນທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ສາມາດເຂົ້າເຖິງແຫຼ່ງທຶນ ທັງພາຍໃນ ແລະຕ່າງປະເທດ ແລະ ໄດ້ຮັບການສະໜັບສະໜູນທາງດ້ານການເງິນ ຕາມຄວາມສາມາດຕົວຈິງຂອງລັດຖະບານ.

ການສະໜັບສະໜູນດ້ານການເງິນ ຕ້ອງອີງໃສ່ຜົນຂອງການສຶກສາຄວາມເປັນໄປໄດ້ທາງດ້ານບົດວິພາກເສດຖະກິດ-ເຕັກນິກແບບລະອຽດ, ການຄົ້ນຄວ້າຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໂດຍອີງໃສ່ປະສິດທິຜົນຂອງໂຄງການລົງທຶນຮ່ວມຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຈຳເປັນທີ່ຕ້ອງໄດ້ມີການສະໜັບສະໜູນດ້ານການເງິນ ເພື່ອໃຫ້ເກີດຜົນປະໂຫຍດແກ່ສັງຄົມ.

ລັດຖະບານ ຈະມີລະບຽບການສະເພາະ ກ່ຽວກັບການສ້າງຕັ້ງກອງທຶນພັດທະນາໂຄງການລົງທຶນຮ່ວມ ເພື່ອເປັນແຫຼ່ງທຶນນຳໃຊ້ເຂົ້າໃນການສຶກສາຄວາມເປັນໄປໄດ້ຂອງໂຄງການຂອງລັດຖະບານ ຢ່າງ

ມີປະສິດທິຜົນ, ສາມາດນຳເອົາໂຄງການໄປປະມູນຄັດເລືອກເອົາຜູ້ພັດທະນາທີ່ດີ ເພື່ອຮັບປະກັນຜົນປະໂຫຍດສູງສຸດໃຫ້ແກ່ລັດຖະບານ ແລະ ສັງຄົມ.

**ມາດຕາ 46 ການສະໜັບສະໜູນດ້ານນະໂຍບາຍສົ່ງເສີມ**

ການສະໜັບສະໜູນດ້ານນະໂຍບາຍສົ່ງເສີມ ແມ່ນການກຳນົດຂອບເຂດດ້ານນະໂຍບາຍການຫຼຸດຜ່ອນ ຫຼື ຍົກເວັ້ນ ພາສີ, ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ລວມທັງ ການຮັບປະກັນ ແລະ ການຄ້ຳປະກັນຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ລັດຖະບານເປັນຜູ້ພິຈາລະນາ ກ່ຽວກັບການໃຫ້ນະໂຍບາຍສົ່ງເສີມ ສຳລັບແຕ່ລະໂຄງການລົງທຶນຮ່ວມ ໂດຍອີງຕາມຜົນຂອງການສຶກສາ-ສຳຫຼວດ ເບື້ອງຕົ້ນ, ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ.

## ໝວດທີ 3
## ການຮັບປະກັນ ແລະ ການຄ້ຳປະກັນ

**ມາດຕາ 47 ການຮັບປະກັນ**

ຊັບສິນບັດ, ທຶນ ແລະ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍ ຂອງພາກເອກະຊົນ ຢູ່ ສປປ ລາວ ຈະບໍ່ຖືກ ເກັບເກນ, ຍຶດ ຫຼື ໂອນ ເປັນຂອງລັດ ດ້ວຍວິທີການທາງບໍລິຫານ ເວັ້ນເສຍແຕ່ມີຄວາມຈຳເປັນ ເພື່ອສາທາລະນະປະໂຫຍດໂດຍມີການທົດແທນຄືນ ຕາມມູນຄ່າຕົວຈິງທີ່ໄດ້ລົງທຶນ, ຕາມລາຄາຕະຫຼາດ ໃນເວລາມອບໂອນ ຫຼື ຕາມວິທີການຊຳລະທີ່ໄດ້ຕົກລົງກັນ ຫຼື ກຳນົດໄວ້ໃນສັນຍາການລົງທຶນຮ່ວມ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 48 ການຄ້ຳປະກັນ**

ບໍລິສັດໂຄງການລົງທຶນຮ່ວມ ສາມາດນຳເອົາຊັບສິນ, ສິດຕາມສັນຍາ ແລະ ຜົນປະໂຫຍດຂອງຕົນ ໃນໂຄງການລົງທຶນຮ່ວມໄປເປັນຫຼັກຊັບຄ້ຳປະກັນການກູ້ຢືມ ເພື່ອມາພັດທະນາໂຄງການດັ່ງກ່າວ ໂດຍສອດຄ່ອງກັບເງື່ອນໄຂທີ່ຕົກລົງກັນໄວ້ໃນສັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ບົນພື້ນຖານການຕົກລົງເຫັນດີຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ຕາມຂອບເຂດສິດຂອງຕົນ.

ຫຼັກຊັບຄ້ຳປະກັນການກູ້ຢືມ ຕາມທີ່ໄດ້ກຳນົດໄວ້ເທິງນີ້ ມີດັ່ງນີ້:

1. ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ເປັນຊັບສິນຂອງບໍລິສັດໂຄງການລົງທຶນຮ່ວມ ຫຼື ຜົນໄດ້ຮັບຂອງໂຄງການລົງທຶນຮ່ວມ;

2. ລາຍຮັບທີ່ຈະເກີດຂຶ້ນໃນອະນາຄົດ ແລະ ລາຍຮັບຂອງ ບໍລິສັດໂຄງການລົງທຶນຮ່ວມ ທີ່ຈະໄດ້ຮັບຈາກໂຄງການ;

3. ຫຼັກຊັບຄ້ຳປະກັນອື່ນ ເປັນຕົ້ນ ຮຸ້ນ, ບັນຊີເງິນຝາກ.

# ໝວດທີ 4
# ການຕິດຕາມ, ກວດກາ ແລະ ການປະເມີນຜົນ
# ໂຄງການລົງທຶນຮ່ວມ

### ມາດຕາ 49 ຄວາມຮັບຜິດຊອບລວມໃນການຕິດຕາມ, ກວດກາ ແລະ ການປະເມີນຜົນໂຄງການ

ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການ ຕິດຕາມ, ກວດກາ ແລະ ປະເມີນຜົນ ໂຄງການລົງທຶນຮ່ວມ ເປັນຕົ້ນ ການກະກຽມ, ການປະມູນ, ການນຳໃຊ້ທຶນຂອງໂຄງການ, ການຈັດຕັ້ງປະຕິບັດສັນຍາ ໃນແຕ່ລະໄລຍະ ເຊັ່ນ ໄລຍະກໍ່ສ້າງ, ດຳເນີນງານ, ບຳລຸງຮັກສາ ແລະ ການມອບຮັບ ຫຼື ມອບໂອນໂຄງການ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອໃຫ້ການຈັດຕັ້ງປະຕິບັດສັນຍາ ແລະ ໂຄງການລົງທຶນຮ່ວມ ໃຫ້ໄດ້ຮັບຜົນສຳເລັດ.

ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງນັ້ນ ຕ້ອງສ້າງກົນໄກ ຕິດຕາມ, ກວດກາ ແລະ ປະເມີນຜົນໄດ້ຮັບຈາກການຈັດຕັ້ງປະຕິບັດເປົ້າໝາຍ ແລະ ລະດັບຄາດໝາຍຂອງໂຄງການ.

### ມາດຕາ 50 ຄວາມຮັບຜິດຊອບຂອງ ຫ້ອງການການລົງທຶນຮ່ວມ

ຫ້ອງການລົງທຶນຮ່ວມ ມີຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

1. ເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການຕິດຕາມກວດກາຜົນສຳເລັດຂອງການຈັດຕັ້ງປະຕິບັດຕົວຊີ້ວັດ ຕາມມາດຕະຖານ ແລະ ເງື່ອນໄຂ ເພື່ອບັນລຸເປົ້າໝາຍຂອງໂຄງການທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

2. ປະສານສົມທົບກັບ ຂະແໜງການ, ເຈົ້າຂອງໂຄງການ ແລະ ຜູ້ກວດກາເອກະລາດ ໃນການທົບທວນຄືນກ່ຽວກັບການກວດກາ ແລະ ການຮັບປະກັນຄຸນນະພາບ;

3. ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ, ເຈົ້າຂອງໂຄງການ ແລະ ບໍລິສັດໂຄງການລົງທຶນຮ່ວມໃນການຕິດຕາມ, ກວດກາ ແລະ ປະເມີນຜົນໂຄງການລົງທຶນຮ່ວມ ຢ່າງເປັນປົກກະຕິ ໃນແຕ່ລະໄລຍະ;

4. ລາຍງານສະພາບ ແລະ ຄວາມຄືບໜ້າຂອງໂຄງການລົງທຶນຮ່ວມ ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ເປັນປະຈຳ ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ.

### ມາດຕາ 51 ຄວາມຮັບຜິດຊອບຂອງຂະແໜງການ ແລະ ເຈົ້າຂອງໂຄງການ

ຂະແໜງການ ແລະ ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອດຳເນີນການ ຕິດຕາມ, ກວດກາ ແລະ ປະເມີນຜົນ ໂຄງການລົງທຶນຮ່ວມ ໃນແຕ່ລະໄລຍະ ດັ່ງນີ້:

- ໄລຍະການປະມູນໂຄງການ ແລະ ການເຮັດສັນຍາ ຊຶ່ງຕ້ອງດຳເນີນການກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ໃຫ້ຈັດຕັ້ງປະຕິບັດໂຄງການຕາມແຜນ ແລະ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

- ໄລຍະຈັດຕັ້ງປະຕິບັດໂຄງການ ຊຶ່ງຕ້ອງ ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໂດຍຜ່ານຫ້ອງການລົງທຶນຮ່ວມ;

- ໄລຍະຈັດຕັ້ງປະຕິບັດສັນຍາ ຊຶ່ງຕ້ອງດຳເນີນການ ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດພັນທະ ໂດຍອີງໃສ່ເປົ້າໝາຍ, ລະດັບຄາດໝາຍ, ມາດຕະຖານ ແລະ ຄຸນນະພາບຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

ໃນແຕ່ລະໄລຍະ ໃຫ້ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ແລະ ສັນຍາ ຊຶ່ງຕ້ອງໄດ້ລາຍງານຢ່າງເປັນປົກກະຕິ ເຊັ່ນ ໄລຍະ ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໂດຍຜ່ານຫ້ອງການລົງທຶນຮ່ວມ.

### ມາດຕາ 52 ຄວາມຮັບຜິດຊອບຂອງບໍລິສັດໂຄງການລົງທຶນຮ່ວມ

ບໍລິສັດໂຄງການລົງທຶນຮ່ວມ ມີຄວາມຮັບຜິດຊອບໃນການຕິດຕາມ, ກວດກາ, ປະເມີນ, ສະຫຼຸບ ແລະລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການ ແລະ ສັນຍາ ຢ່າງເປັນປົກກະຕິ ຊຶ່ງຕ້ອງລາຍງານ ເປັນໄລຍະ ໜຶ່ງເດືອນ, ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ ຕໍ່ ເຈົ້າຂອງໂຄງການ, ຂະແໜງການການເງິນ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຫ້ອງການລົງທຶນຮ່ວມ.

## ພາກທີ VI
## ການສຳເລັດ, ການມອບຮັບ ແລະ ການມອບໂອນ ໂຄງການລົງທຶນຮ່ວມ

### ມາດຕາ 53 ການສຳເລັດໂຄງການລົງທຶນຮ່ວມ

ການສຳເລັດໂຄງການລົງທຶນຮ່ວມ ແມ່ນ ການສຳເລັດການຈັດຕັ້ງປະຕິບັດບັນດາໜ້າວຽກ ທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການລົງທຶນຮ່ວມ ແລະ ພາກເອກະຊົນທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ຕ້ອງໄດ້ ມອບຮັບ ຫຼື ມອບໂອນໂຄງການ ໃຫ້ແກ່ພາກລັດ ຕາມແຕ່ລະກໍລະນີ.

ກ່ອນການມອບຮັບ ຫຼື ມອບໂອນໂຄງການ ໃຫ້ພາກລັດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ພາກເອກະຊົນ ຜູ້ພັດທະນາໂຄງການ ຕ້ອງເຮັດບົດສະຫຼຸບລາຍງານ ບັນດາໜ້າວຽກທີ່ໄດ້ປະຕິບັດສຳເລັດ ເປັນຕົ້ນ ບໍລິມາດວຽກ, ມູນຄ່າການລົງທຶນ, ການປະຕິບັດພັນທະດ້ານການເງິນ, ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃຫ້ພາກລັດ ພາຍໃນກຳນົດເວລາ ຫົກ ເດືອນ;

2. ຂະແໜງການແຜນການ ແລະ ການລົງທຶນ, ຂະແໜງການກ່ຽວຂ້ອງ ແລະ ເຈົ້າຂອງໂຄງການຕ້ອງຕົກລົງເປັນເອກະພາບກັນກັບພາກເອກະຊົນ ທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ໃນການຄັດເລືອກເອົາຜູ້ກວດສອບເອກະລາດທີ່ມີປະສົບການ ແລະ ຄວາມສາມາດ ເພື່ອມາດຳເນີນການກວດສອບ ແລະ ຢັ້ງຢືນຄຸນນະພາບ ແລະ ຜົນສຳເລັດຂອງໂຄງການ ຕາມມາດຕະຖານທີ່ກຳນົດໄວ້ໃນສັນຍາ ແລະ ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ;

3. ກະຊວງແຜນການ ແລະ ການລົງທຶນ ແຕ່ງຕັ້ງຄະນະກຳມະການ ກວດກາ ແລະ ປະເມີນຜົນໂຄງການລົງທຶນຮ່ວມ ສຳລັບຂັ້ນສູນກາງ, ອົງການປົກຄອງຂັ້ນແຂວງ ແຕ່ງຕັ້ງຄະນະກຳມະການກວດກາ ແລະ ປະເມີນຜົນໂຄງການລົງທຶນຮ່ວມ ສຳລັບຂັ້ນທ້ອງຖິ່ນ ຊຶ່ງປະກອບມີຜູ້ຕາງໜ້າຈາກ ຫ້ອງການລົງທຶນຮ່ວມ, ຂະແໜງການເງິນ, ເຈົ້າຂອງໂຄງການ, ພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນແຂວງ ເພື່ອກວດກາ, ກວດສອບ ແລະ ປະເມີນຜົນສຳເລັດ ແລະ ຄຸນນະພາບຂອງໂຄງການລົງທຶນຮ່ວມຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນສັນຍາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້ ແລ້ວສະຫຼຸບລາຍງານ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

**ມາດຕາ 54 ການມອບຮັບໂຄງການລົງທຶນຮ່ວມ**

ໃນການມອບຮັບໂຄງການລົງທຶນຮ່ວມ ຫ້ອງການລົງທຶນຮ່ວມ ຕ້ອງປະສານສົມທົບກັບຂະແໜງການ, ເຈົ້າຂອງໂຄງການ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການກວດກາດ້ານມາດຕະຖານເຕັກນິກ, ປະລິມານ, ຄຸນນະພາບ, ຊັບສິນໂຄງການ, ການຖ່າຍທອດເຕັກໂນໂລຊີ, ຊັບສິນທາງປັນຍາ ແລະ ການຈັດຝຶກອົບຮົມໃຫ້ພະນັກງານ-ລັດຖະກອນ ຕາມທີ່ໄດ້ກຳນົດໄວ້ໃນເອກະສານ ແລະ ສັນຍາການລົງທຶນຮ່ວມ, ການແນະນຳການນຳໃຊ້ ຫຼື ມີການທົດລອງນຳໃຊ້ໃນໄລຍະໃດໜຶ່ງກ່ອນການມອບຮັບໂຄງການຢ່າງເປັນທາງການ.

**ມາດຕາ 55 ການມອບໂອນໂຄງການລົງທຶນຮ່ວມ**

ໃນການມອບໂອນໂຄງການລົງທຶນຮ່ວມ ຜູ້ພັດທະນາໂຄງການ ຕ້ອງມອບໂອນຊັບສິນ, ສິ່ງປຸກສ້າງ ແລະ ສິ່ງອຳນວຍຄວາມສະດວກທັງໝົດ ພ້ອມດ້ວຍເອກະສານໂຄງການ ເປັນຕົ້ນ ຄູ່ມື, ຂໍ້ມູນ, ເອກະສານກ່ຽວກັບການອອກແບບ, ການກໍ່ສ້າງ, ການດຳເນີນງານ, ການບຳລຸງຮັກສາ ແລະ ເອກະສານອື່ນທີ່ກ່ຽວຂ້ອງໃຫ້ແກ່ພາກລັດໂດຍບໍ່ມີເງື່ອນໄຂ ແລະ ການຊົດເຊີຍຄືນ.

ກ່ອນການສິ້ນສຸດອາຍຸສັນຍາການລົງທຶນຮ່ວມ ສອງ ປີ ຜູ້ພັດທະນາໂຄງການ ຕ້ອງດຳເນີນການສ້ອມແປງໃຫຍ່ສິ່ງປະກອບສ້າງຂອງໂຄງການລົງທຶນຮ່ວມ ເພື່ອຮັບປະກັນວ່າ ຊັບສິນ, ສິ່ງປຸກສ້າງ ແລະ ສິ່ງອຳນວຍຄວາມສະດວກທັງໝົດ ທີ່ຈະມອບໂອນໃຫ້ພາກລັດ ຢູ່ໃນສະພາບດີ ແລະ ສາມາດດຳເນີນງານໄດ້ປົກກະຕິ, ມີປະສິດທິພາບ ໂດຍໄດ້ຮັບການກວດກາ ແລະ ຢັ້ງຢືນ ຈາກວິສະວະກອນເອກະລາດ ຫຼື ອົງການທີ່ລັດທີ່ຕົກລົງເຫັນດີຮ່ວມກັນ.

ກ່ອນການສິ້ນສຸດອາຍຸສັນຍາ ໜຶ່ງ ປີ ຜູ້ພັດທະນາໂຄງການ ຕ້ອງດຳເນີນການຝຶກອົບຮົມສັງລວມຂັ້ນສຸດທ້າຍວຽກງານສຳຄັນກ່ຽວກັບການດຳເນີນງານ ແລະ ບຳລຸງຮັກສາ ໃຫ້ພະນັກງານຂອງລັດ.

ການລົງທຶນຮ່ວມ ໃນທຸກຮູບແບບ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້, ຍົກເວັ້ນການລົງທຶນຮ່ວມໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (BOO), ພາຍຫຼັງສິ້ນສຸດສັນຍາການລົງທຶນຮ່ວມ ຕ້ອງມອບຮັບ ຫຼື ມອບໂອນ ໂຄງການລົງທຶນຮ່ວມໃຫ້ພາກລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53-55 ຂອງດຳລັດສະບັບນີ້.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 56 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;

2. ພົວພັນ, ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອ ແກ່ຜູ້ເຂົ້າຮ່ວມການປະມູນ, ເປັນສື່ກາງ ຫຼື ນາຍໜ້າ, ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

3. ສໍ້ລາດບັງຫຼວງ, ສໍ້ໂກງ, ຕົວະຍົວະ, ຫຼອກລວງ ກ່ຽວກັບການປະມູນໂຄງການ ແລະ ການລົງທຶນຮ່ວມ;

4. ປອມແປງເອກະສານ ຫຼື ຕາປະທັບ ກ່ຽວກັບການລົງທຶນຮ່ວມ;

5. ຂັດຂວາງ, ແຊກແຊງ ການປະຕິບັດໜ້າທີ່ ຂອງພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ເປັນທີ່ປຶກສາໃນການກະກຽມ, ການອອກແບບ ຫຼື ການກຳນົດມາດຕະຖານ-ເຕັກນິກ ຂອງສິນຄ້າ ແລະ ການບໍລິການ ກ່ຽວກັບການລົງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 57 ຂໍ້ຫ້າມ ສຳລັບຫ້ອງການລົງທຶນຮ່ວມ, ຂະແໜງການ ແລະ ເຈົ້າຂອງໂຄງການ**

ຫ້າມ ຫ້ອງການລົງທຶນຮ່ວມ, ຂະແໜງການ ແລະ ເຈົ້າຂອງໂຄງການ ມີພຶດຕິກຳ ດັ່ງນີ້:

1. ຕົກລົງຮັບຮອງເອົາ ບົດສະເໜີເບື້ອງຕົ້ນ ແລະ ບົດສະເໜີແນວຄວາມຄິດລິເລີ່ມ ສຳລັບໂຄງການລົງທຶນຮ່ວມໂດຍບໍ່ຜ່ານຂັ້ນຕອນການພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະ ບຽບການທີ່ກ່ຽວຂ້ອງ;

2. ປິດບັງ, ກົດໜ່ວງ, ຖ່ວງດຶງ ແລະ ຊຸກເຊື່ອງ ເອກະສານກ່ຽວກັບການລົງທຶນຮ່ວມ;

3. ກົດໜ່ວງ, ແກ່ຍາວ ຂັ້ນຕອນການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ;

4. ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ກ່ຽວກັບການປະມູນໂຄງການ ແລະ ການລົງທຶນຮ່ວມ ລວມທັງແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຮ່ວມ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ສໍ້ລາດບັງຫຼວງ, ສໍ້ໂກງ, ຕົວະຍົວະ, ຫຼອກລວງ, ສົມຮູ້ຮ່ວມຄິດ ກ່ຽວກັບການປະມູນໂຄງການ ແລະ ການລົງທຶນຮ່ວມ;

6. ເປີດ ຫຼື ນຳໃຊ້ບັນຊີໃນນາມຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

7. ອ່ວຍທຶນ ຈາກໂຄງການລົງທຶນຮ່ວມໃດໜຶ່ງ ທີ່ຖືກຮັບຮອງແລ້ວ ໄປໃສ່ການລົງທຶນ ຕາມບົດສະເໜີເບື້ອງຕົ້ນ ແລະ ແນວຄວາມຄິດລິເລີ່ມ ສໍາລັບໂຄງການລົງທຶນຮ່ວມ ອື່ນທີ່ໄດ້ຮັບການສະໜັບສະໜູນດ້ານການເງິນ;

8. ປ່ຽນແປງໂຄງສ້າງ ແລະ/ຫຼື ເພີ່ມບໍລິມາດວຽກຂອງໂຄງການລົງທຶນຮ່ວມທີ່ຖືກຮັບຮອງແລ້ວ ໂດຍບໍ່ໄດ້ຮັບການເຫັນດີຈາກຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ຫຼື ລັດຖະບານ;

9. ອະນຸຍາດໃຫ້ທີ່ປຶກສາ ແລະ ຜູ້ຮັບເໝົາໂຄງການ, ດັດແກ້ມາດຕະຖານ-ເຕັກນິກຂອງໂຄງການ ໂດຍບໍ່ໄດ້ຮັບການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ, ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ຫຼື ລັດຖະບານ;

10. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການລົງທຶນຮ່ວມ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;

11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 58 ຂໍ້ຫ້າມສໍາລັບຄະນະກໍາມະການປະມູນ**

ຫ້າມ ຄະນະກໍາມະການປະມູນ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕໍາແໜ່ງ, ບັງຄັບ, ນາບຂູ່ຜູ້ເຂົ້າຮ່ວມປະມູນ ເພື່ອຫາຜົນປະໂຫຍດສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;

2. ສໍ້ລາດບັງຫຼວງ, ສໍ້ໂກງ, ຕົວະຍົວະ, ຫຼອກລວງ ແລະ ສົມຮູ້ຮ່ວມຄິດໃນການປະມູນ ລວມທັງຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບສິນບົນ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ແລະ ປະຕິບັດໜ້າທີ່ເກີນຂອບເຂດ;

5. ປິດບັງ, ກົດໜ່ວງ, ຖ່ວງດຶງ ແລະ ຊຸກເຊື່ອງ ເອກະສານ ກ່ຽວກັບການປະມູນ ລວມທັງກົດໜ່ວງ ຫຼື ແກ່ຍາວການປະມູນ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 59 ຂໍ້ຫ້າມສໍາລັບທີ່ປຶກສາໂຄງການ**

ຫ້າມ ທີ່ປຶກສາໂຄງການ ມີພຶດຕິກໍາ ດັ່ງນີ້:

1. ໃຫ້ຄໍາປຶກສາໂດຍບໍ່ມີຄວາມຮັບຜິດຊອບ, ບໍ່ຖືກຕ້ອງຕາມຄວາມຈິງ, ຫຼືບຫຼີກການໃຫ້ ຄໍາປຶກສາ ຫຼື ຄໍາແນະນໍາດ້ານວິຊາການທີ່ດີກ່ຽວກັບໂຄງການໃຫ້ແກ່ເຈົ້າຂອງໂຄງການ, ພາກລັດ ແລະ ພາກເອກະຊົນ;

2. ສະໜອງຂໍ້ມູນທາງດ້ານການເງິນ, ມາດຕະຖານ-ເຕັກນິກ ຂອງໂຄງການ ບໍ່ຖືກຕ້ອງກັບຄວາມເປັນຈິງ;

3. ເມີນເສີຍຕໍ່ການປະຕິບັດໜ້າທີ່ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາການລົງທຶນຮ່ວມ;

4. ດັດແກ້ມາດຕະຖານ-ເຕັກນິກ, ເພີ່ມ ຫຼື ຫຼຸດບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ຫຼື ລັດຖະບານ;

5. ສົມຮູ້ຮ່ວມຄິດກັບ ເຈົ້າຂອງໂຄງການ, ຄະນະກຳມະການປະມູນ ຫຼື ພາກເອກະຊົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;

6. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 60 ຂໍ້ຫ້າມສຳລັບ ພາກເອກະຊົນ, ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ໄດ້ຮັບຄັດເລືອກ

ຫ້າມ ພາກເອກະຊົນ, ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ໄດ້ຮັບຄັດເລືອກ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່, ໃຫ້ສິນບົນແກ່ ເຈົ້າໜ້າທີ່, ພະນັກງານ ແລະ ທີ່ປຶກສາໂຄງການທີ່ຮັບຜິດຊອບໂດຍກົງ ຫຼື ກ່ຽວຂ້ອງກັບການລົງທຶນຮ່ວມ ໂດຍກົງ ຫຼື ທາງອ້ອມ;

2. ເມີນເສີຍຕໍ່ການຄຸ້ມຄອງການປະຕິບັດໂຄງການລົງທຶນຮ່ວມ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ດັດແກ້ມາດຕະຖານ-ເຕັກນິກ, ເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ ແລະ ການເຫັນດີຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ຫຼື ລັດຖະບານ;

4. ຫຼົບຫຼີກການປະຕິບັດພັນທະ ພາສີ, ອາກອນ, ປິດບັງລາຍໄດ້, ຜົນກຳໄລ ລວມທັງຕົວເລກການເສຍພາສີ, ອາກອນ;

5. ເຮັດໃຫ້ເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ເຂົ້າໃຈຜິດ ກ່ຽວກັບ ຄຸນລັກສະນະ, ຄຸນນະພາບ, ຮູບແບບ ແລະ ສັນຍາລັກອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ເຄື່ອງໝາຍການຄ້າ, ຍີ່ຫໍ້ຂອງສິນຄ້າ;

6. ຂາຍໂຄງການທີ່ຕົນປະມູນໄດ້ໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ;

7. ໂອນ ຫຼື ມອບສິດ, ພັນທະ ແລະ ຜົນປະໂຫຍດສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ທີ່ເກີດຈາກສັນຍາໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນທີ່ບໍ່ກ່ຽວຂ້ອງ ໂດຍບໍ່ໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກລັດຖະບານ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ໃນສັນຍາຮ່ວມທຶນ;

8. ໂຄສະນາທຸກຮູບແບບ ເພື່ອເປັນການຊຸກຍູ້, ສົ່ງເສີມ ການກໍ່ສ້າງ ແລະ/ຫຼື ການສ້ອມແປງ, ການສະໜອງສິນຄ້າ ແລະ/ຫຼື ການບໍລິການ ທີ່ເປັນການລະເມີດກົດໝາຍ;

9. ແອບອ້າງຜົນງານ ຫຼື ຊື່ສຽງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ, ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;

10. ກະທຳ ຫຼື ເຄື່ອນໄຫວ ທີ່ມີຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ຂອງຊາດ;

11. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ພາກທີ VIII
# ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຫ້ອງການລົງທຶນຮ່ວມ

## ມາດຕາ 61 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ແມ່ນຄະນະກຳມະການດຽວກັນກັບ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ມີພາລະບົດບາດສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

## ມາດຕາ 62 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳການຄົ້ນຄວ້າ ຮ່າງນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອສະເໜີ ຕໍ່ລັດຖະບານ ພິຈາລະນາ;

2. ຊີ້ນຳການຫັນເອົາ ນະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ ມາເປັນ ແຜນງານ, ແຜນການ ແລະ ໂຄງການລະອຽດກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລວມທັງແຜນງົບປະມານການລົງທຶນຮ່ວມ;

3. ຊີ້ນຳການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການລົງທຶນຮ່ວມ ໃນການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;

4. ພິຈາລະນາ ແລະ ຮັບຮອງ ບົດສະເໜີເບື້ອງຕົ້ນ, ບົດວິພາກເສດຖະກິດ-ເຕັກນິກແບບລະອຽດຂອງໂຄງການລົງທຶນຮ່ວມ;

5. ພິຈາລະນາ ຕົກລົງເຫັນດີ, ມີຄຳເຫັນ ຫຼື ປະຕິເສດ ການພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ໂດຍອີງຕາມບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແບບລະອຽດຂອງໂຄງການ;

6. ພິຈາລະນາຄົ້ນຄວ້າ ແລະ ມີຄຳເຫັນຕໍ່ການສະເໜີຂໍລົງທຶນຮ່ວມ ຕາມແນວຄວາມຄິດລິເລີ່ມໂຄງການລົງທຶນຮ່ວມ;

7. ພິຈາລະນາຮັບຮອງ ຫຼື ມີຄຳເຫັນ ຕໍ່ຮ່າງສັນຍາ;

8. ຊີ້ນຳ ແລະ ຕິດຕາມ ກວດກາ ການປະເມີນຜົນ ໂຄງການລົງທຶນຮ່ວມ;

9. ພິຈາລະນາ ແລະ ຮັບຮອງເອົາການວ່າຈ້າງຜູ້ຊ່ຽວຊານ ແລະ ທີ່ປຶກສາ ຕາມການສະເໜີ ຂອງຫ້ອງການລົງທຶນຮ່ວມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການລົງທຶນຮ່ວມຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 63 ຫ້ອງການລົງທຶນຮ່ວມ

ຫ້ອງການລົງທຶນຮ່ວມ ຂຽນຫຍໍ້ວ່າ "ຫລອ" ແມ່ນ ຫ້ອງການດຽວກັນກັບຫ້ອງການບໍລິການການລົງທຶນປະຕູດຽວ ເປັນຫ້ອງການປະຈຳການ ແລະ ເສນາທິການໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ.

### ມາດຕາ 64 ສິດ ແລະ ໜ້າທີ່ ຂອງຫ້ອງການລົງທຶນຮ່ວມ

ຫ້ອງການລົງທຶນຮ່ວມ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງຮ່າງນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ແລ້ວສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ;

2. ໃຫ້ບໍລິການ ການລົງທຶນຮ່ວມ ໃຫ້ມີປະສິດທິພາບ, ກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ;

3. ຄົ້ນຄວ້າ, ສ້າງ ຮ່າງສັນຍາມາດຕະຖານ, ລະບົບຄຸ້ມຄອງຂໍ້ມູນ ແລະ ເວັບໄຊ໌ ຂອງຫ້ອງການລົງທຶນຮ່ວມ;

4. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການຄັດເລືອກໂຄງການລົງທຶນຮ່ວມເບື້ອງຕົ້ນເພື່ອຈັດເຂົ້າໃນແຜນໂຄງການລົງທຶນຮ່ວມ ແລ້ວນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ພິຈາລະນາ ໃນເດືອນມີນາ ຂອງທຸກປີ;

5. ຄົ້ນຄວ້າ ແລະ ມີຄຳເຫັນດ້ານວິຊາການ ກ່ຽວກັບ ບົດສະເໜີເບື້ອງຕົ້ນ, ບົດສະເໜີແນວຄວາມຄິດລິເລີ່ມ, ບົດວິພາກເສດຖະກິດ-ເຕັກນິກ ແລະ ການປະມູນ ໂຄງການລົງທຶນຮ່ວມ ແລ້ວສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ;

6. ຄົ້ນຄວ້າ, ສ້າງ ຮ່າງລະບຽບການກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທຶນສຳລັບການກະກຽມໂຄງການລົງທຶນຮ່ວມ;

7. ຄຸ້ມຄອງ ແລະ ບໍລິຫານ ການນຳໃຊ້ທຶນສຳລັບການກະກຽມໂຄງການລົງທຶນຮ່ວມ ລວມທັງການຈ້າງຜູ້ຊ່ຽວຊານ ແລະ ທີ່ປຶກສາ, ຄ່າໃຊ້ຈ່າຍໃນການປະມູນ ແລະ ການສ້າງ, ບຳລຸງ, ຍົກລະດັບພະນັກງານກ່ຽວກັບວຽກງານລົງທຶນຮ່ວມ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນຕໍ່ ກະຊວງແຜນການ ແລະ ການລົງທຶນ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ IX
## ການຄຸ້ມຄອງ ແລະ ກວດກາ ວຽກງານລົງທຶນຮ່ວມ

**ມາດຕາ 65 ອົງການຄຸ້ມຄອງ ແລະ ກວດກາ ວຽກງານລົງທຶນຮ່ວມ**

ລັດຖະບານ ເປັນຜູ້ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານລົງທຶນຮ່ວມ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການລົງທຶນຮ່ວມ ມີ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ;
2. ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ;
3. ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງວຽກງານລົງທຶນຮ່ວມ ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ໂຄສະນາເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການກ່ຽວກັບການລົງທຶນຮ່ວມ;

2. ສ້າງແຜນການ, ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ຄູ່ມື ກ່ຽວກັບວຽກງານການລົງທຶນຮ່ວມ;

3. ສ້າງ, ຄຸ້ມຄອງລະບົບ ແລະ ສະໜອງ ຂໍ້ມູນ, ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນຮ່ວມ;

4. ເປັນໃຈກາງປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ສັງລວມ, ເຈລະຈາສັນຍາ ແລະ ຕາງໜ້າລັດຖະບານລົງນາມໃນສັນຍາ ໂຄງການລົງທຶນຮ່ວມ ຕາມການມອບໝາຍຂອງລັດຖະບານ;

5. ຄົ້ນຄວ້າ ແລະ ສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການການລົງທຶນຮ່ວມ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດ ບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

6. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນຂອບເຂດທົ່ວປະເທດ;

7. ຊີ້ນຳ ແລະ ອຳນວຍຄວາມສະດວກໃນການບໍລິການ ການລົງທຶນຮ່ວມ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

8. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານລົງທຶນຮ່ວມ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານລົງທຶນຮ່ວມ;

10. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານລົງທຶນຮ່ວມຕໍ່ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານລົງທຶນຮ່ວມ ພະແນກແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ ແລະ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການລົງທຶນຮ່ວມ;

2. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງ ເພື່ອຄົ້ນຄວ້າ ແລະ ສັງລວມໂຄງການລົງທຶນຮ່ວມ ແລ້ວນຳສະເໜີຫ້ອງການລົງທຶນຮ່ວມ ເພື່ອສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມພິຈາລະນາ;

3. ປະສານສົມທົບກັບ ບັນດາຂະແໜງການທ້ອງຖິ່ນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການການລົງທຶນຮ່ວມໃນທ້ອງຖິ່ນຕົນ;

4. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ ລວມທັງການຈັດຕັ້ງປະຕິບັດດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຮ່ວມ;

5. ອຳນວຍຄວາມສະດວກໃນການດຳເນີນວຽກງານການລົງທຶນຮ່ວມ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນຮ່ວມຕາມການມອບໝາຍຂອງຂັ້ນເທິງ;

7. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນຮ່ວມ;

8. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານການລົງທຶນຮ່ວມພາຍໃນແຂວງ, ນະຄອນຫຼວງ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ການມອບໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານລົງທຶນຮ່ວມ ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການລົງທຶນຮ່ວມ;

2. ຊຸກຍູ້, ຕິດຕາມ ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການລົງທຶນຮ່ວມ;

3. ປະສານສົມທົບກັບບັນດາຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນເມືອງ, ເທດສະບານ, ນະຄອນໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ການລົງທຶນຮ່ວມ;

4. ອໍານວຍຄວາມສະດວກ, ສະໜັບສະໜູນ ການເຄື່ອນໄຫວວຽກງານລົງທຶນຮ່ວມ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ມີປະສິທິຜົນ;

5. ເກັບກໍາຂໍ້ມູນກ່ຽວກັບການລົງທຶນຮ່ວມຢູ່ພາຍໃນ ເມືອງ, ເທດສະບານ, ນະຄອນ;

6. ສະເໜີການສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານລົງທຶນຮ່ວມ;

7. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນຮ່ວມຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 69 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ

ຂະແໜງການອື່ນ ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນ ໃນການຮ່ວມມື, ຄຸ້ມຄອງ, ຕິດຕາມ, ກວດກາ, ຈັດຕັ້ງປະຕິບັດ, ປະສານສົມທົບ, ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດການລົງທຶນຮ່ວມ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 70 ເນື້ອໃນການກວດກາ

ເນື້ອໃນການກວດກາ ມີ ດັ່ງນີ້:

1. ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການລົງທຶນຮ່ວມ;

2. ກວດກາ ການປະຕິບັດສັນຍາ;

3. ກວດກາ ການປະຕິບັດຂັ້ນຕອນຂອງການລົງທຶນຮ່ວມ ຕາມທີ່ໄດ້ກໍານົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ.

### ມາດຕາ 71 ຮູບການການກວດກາ

ການກວດກາມີ ສາມ ຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ມີລັກສະນະເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ ໂດຍແມ່ນຫ້ອງການລົງທຶນຮ່ວມ ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າ ມີຄວາມຈໍາເປັນ ແລະ ຮີບ

ດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາດ້ານເອກະສານ ແລະ ການປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 72 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຊຸກຍູ້, ສົ່ງເສີມ ແລະ ດຶງດູດ ການລົງທຶນຮ່ວມ ທີ່ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຢ່າງມີປະສິດທິຜົນສູງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 73 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້, ກົດໝາຍ, ລະບຽບການ, ສັນຍາ ແລະ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ທາງແພ່ງ ຫຼື ດຳເນີນຄະດີອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

### ມາດຕາ 74 ການຈັດຕັ້ງປະຕິບັດ

ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 75 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການສິບຫ້າ ວັນລັດຖະການ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 636 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງແຜນການ ແລະ ການລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 09/ສພຊ, ລົງວັນທີ 22 ມີນາ 2021 ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1459/ຜທ, ລົງວັນທີ 23 ສິງຫາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 204/ພນ, ລົງວັນທີ 31 ສິງຫາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງແຜນການ ແລະ ການລົງທຶນ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາຂະແໜງແຜນການ ແລະ ການລົງທຶນ ແລະ ລະບົບສະຖິຕິແຫ່ງຊາດໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງແຜນການ ແລະ ການລົງທຶນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກຜທ" ຂຽນເປັນພາສາອັງກິດ "Ministry of Planning and Investment" ຂຽນເປັນຕົວຫຍໍ້ວ່າ "MPI" ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກກ່ຽວກັບວຽກງານແຜນການ ແລະ ການລົງທຶນ, ວຽກງານສະຖິຕິແຫ່ງຊາດ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ ມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ລັດຖະດຳລັດ, ມະຕິ ແລະ ນິຕິກຳລຸ່ມກົດໝາຍຂອງລັດຖະບານ;
2. ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ ແລະ ມະຕິຕົກລົງຂອງລັດຖະບານກ່ຽວກັບວຽກງານແຜນການ ແລະ ການລົງທຶນ ມາເປັນວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດໄລຍະ 5 ປີ, ປະຈຳປີ, ແຜນການ, ແຜນງານ ແລະ ໂຄງການລະອຽດໃນແຕ່ລະປີ ແລະ ຮັບຜິດຊອບນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ປາກົດຜົນເປັນຈິງ ບັນລຸໄດ້ເປົ້າໝາຍ ແລະ ຄາດໝາຍສູ້ຊົນ ແຕ່ລະໄລຍະ ແລະ ມີປະສິດທິຜົນ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ, ດຳລັດ ແລະ ນິຕິກຳລຸ່ມກົດໝາຍ ຂອງຂະແໜງແຜນການ ແລະ ການລົງທຶນ ເພື່ອສະເໜີຕໍ່ລັດຖະບານ, ພິຈາລະນາພ້ອມທັງຕິດຕາມ, ກວດກາການຈັດຕັ້ງປະຕິບັດ;
4. ເປັນເຈົ້າການສ້າງ, ຊຸກຍູ້, ຕິດຕາມກວດກາ, ປະເມີນ ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວິໄສທັດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນການລົງທຶນຂອງລັດ, ແຜນງານ, ໂຄງການລະອຽດ ໃນແຕ່ລະໄລຍະໂດຍປະສານສົມທົບກັບທຸກຂະແໜງການ ແລະ ທ້ອງຖິ່ນ ເພື່ອສະເໜີລັດຖະບານ ນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາ;
5. ຊີ້ນຳດ້ານວິຊາການກ່ຽວກັບວຽກງານແຜນການ, ການປະເມີນໂຄງການລົງທຶນຂອງລັດ, ວຽກງານຮ່ວມມືສາກົນ, ວຽກສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ, ວຽກສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ວຽກສະຖິຕິ ໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນຕ່າງໆ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;

6. ຄົ້ນຄ້ວາເຊື່ອມສານນະໂຍບາຍເພື່ອຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ຄົ້ນຄ້ວາສັງລວມການສະເໜີໂຄງການແກ້ໄຂສຸກເສີນ ແລະ ໂຄງການຟື້ນຟູ ຜົນກະທົບຈາກໄພພິບັດຕາມການສະເໜີຂອງຂະແໜງການ ແລະ ທ້ອງຖິ່ນ ພ້ອມທັງຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດຕໍ່ລັດຖະບານ;
7. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາ, ວິເຄາະ-ວິໄຈ, ຄາດຄະເນທ່າອ່ຽງການຂະຫຍາຍຕົວຂອງເສດຖະກິດ, ກຳນົດຄາດໝາຍລວມ, ເປົ້າໝາຍຕົ້ນຕໍ ແລະ ການດຸ່ນດ່ຽງດ້ານມະຫາພາກ ເພື່ອຮັບໃຊ້ໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 5ປີ ແລະ ປະຈຳປີ;
8. ປະເມີນໂຄງການລົງທຶນຂອງລັດ ກ່ອນການພິຈາລະນາເອົາເຂົ້າແຜນການລົງທຶນ ແລະ ປະເມີນໂຄງການລົງທຶນຂອງລັດ, ປະເມີນໂຄງການລົງທຶນຂອງລັດໄລຍະຈັດຕັ້ງປະຕິບັດ, ປະເມີນໂຄງການສຳເລັດ 100% ກ່ອນການມອບ-ຮັບ ແລະ ປະເມີນໂຄງການພາຍຫຼັງການນຳໃຊ້ແຕ່ 2-5ປີ;
9. ຕິດຕາມການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການທີ່ກ່ຽວພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການລົງທຶນຂອງລັດ ໃນແຕ່ລະໄລຍະ, ຄົ້ນຄ້ວາມາດຕະການຄຸ້ມຄອງດ້ານເສດຖະກິດມະຫາພາກ ແລະ ນະໂຍບາຍແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ນະໂຍບາຍລຶບລ້າງຄວາມທຸກຍາກ, ນະໂຍບາຍການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ນະໂຍບາຍການພັດທະນາແບບຍືນຍົງ ແລະ ສີຂຽວ, ການອະນຸລັກຮັກສາສິ່ງແວດລ້ອມ, ການປະຢັດ ແລະ ການນຳໃຊ້ພະລັງງານ ເພື່ອນຳສະເໜີຕໍ່ລັດຖະບານໃນແຕ່ລະໄລຍະ;
10. ຄົ້ນຄວ້າ, ສັງລວມ, ຕິດຕາມ, ປະສານສົມທົບ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດນະໂຍບາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ເພື່ອສະເໜີລັດຖະບານ, ນາຍົກລັດຖະມົນຕີ ພິຈາລະນາອະນຸມັດ ຫຼື ຖອນອະນຸມັດການລົງທຶນ;
11. ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ເປັນໃຈກາງປະສານວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂອງເອກະຊົນ ທີ່ມາລົງທຶນ ຢູ່ ສປປ ລາວ ແລະ ການອອກໄປລົງທຶນຢູ່ຕ່າງປະເທດຂອງວິສາຫະກິດພາຍໃນ ໂດຍການປະສານງານກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ຂັ້ນແຂວງຕາມກົນໄກປະຕູດຽວ;
12. ສົ່ງເສີມການລົງທຶນຂອງພາກເອກະຊົນ ຢູ່ ສປປ ລາວ ໂດຍການໃຫ້ນະໂຍບາຍດ້ານພາສີ-ອາກອນ, ອອກໃບອະນຸຍາດລົງທຶນ ແລະ ຄຸ້ມຄອງການລົງທຶນ ໃນກິດຈະການສຳປະທານ ແລະ ກິດຈະການຄວບຄຸມໂດຍຜ່ານກົນໄກປະຕູດຽວ ພ້ອມທັງລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;
13. ດຳເນີນການຮ່ວມມືດ້ານວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນກັບພາກພື້ນ ແລະ ສາກົນ ບົນພື້ນຖານ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ ແລະ ຄວາມເປັນເອກະລາດແຫ່ງຊາດ;

14. ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ເປັນໃຈກາງປະສານວຽກງານສົ່ງເສີມ ແລະ ຄຸ້ມຄອງ ເຂດເສດຖະກິດພິເສດ ແລະ ການລົງທຶນຂອງວິສາຫະກິດລົງທຶນຢູ່ພາຍໃນເຂດເສດຖະກິດພິເສດ ເພື່ອສະຫຼຸບຕີລາຄາຕໍ່ລັດຖະບານຢ່າງເປັນປົກກະຕິ ແລະ ທັນເວລາ;

15. ເປັນໃຈກາງຄົ້ນຄວ້າຍຸດທະສາດການຮ່ວມມືກັບຄູ່ຮ່ວມພັດທະນາ, ລະດົມທຶນ, ອະນຸມັດ, ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດແຜນງານ, ໂຄງການການຮ່ວມມືເພື່ອການພັດທະນາເປັນແຕ່ລະໄລຍະ ແລະ ຢັ້ງຢືນທຶນສົມທົບຂອງລັດຖະບານ ພ້ອມທັງສະຫຼຸບລາຍງານຂັ້ນເທິງຢ່າງເປັນປົກກະຕິ;

16. ເປັນໃຈກາງຄົ້ນຄວ້າ ແລະ ປະສານງານໃນການຮ່ວມມືຮອບດ້ານ ແລະ ຕິດຕາມ, ຊຸກຍູ້ບັນດາໂຄງການ, ການຮ່ວມມື, ການຊ່ວຍເຫຼືອ ແລະ ການລົງທຶນ ລະຫວ່າງ ລາວ-ຫວຽດນາມ ແລະ ລາວ-ຈີນ ໃນຂອບເຂດສິດຂອງຕົນ ຕາມການຕົກລົງຂອງລັດຖະບານ ໃນແຕ່ລະໄລຍະ;

17. ນໍາພາ, ຊີ້ນໍາ, ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະຖິຕິ ແລະ ຍຸດທະສາດພັດທະນາລະບົບສະຖິຕິ ແບບຍືນຍົງ, ກໍານົດຕົວຊີ້ບອກເພື່ອຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ ແລະ ສະຫຼຸບສັງລວມລາຍງານການຈັດຕັ້ງປະຕິບັດວຽກງານສະຖິຕິ ຕໍ່ລັດຖະບານຢ່າງເປັນປົກກະຕິ;

18. ຄຸ້ມຄອງ, ກໍານົດຕໍາແໜ່ງງານ, ສ້າງແຜນການບໍາລຸງ, ກໍ່ສ້າງ, ສັບຊ້ອນ ພະນັກງານ-ລັດຖະກອນ ລວມທັງການສົ່ງເສີມບົດບາດ ຍິງ-ຊາຍ, ການປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂອງຂະແໜງແຜນການ ແລະ ການລົງທຶນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

19. ຄົ້ນຄວ້າ ແລະ ຜັນຂະຫຍາຍຍຸດທະສາດ, ນິຕິກໍາກ່ຽວກັບວຽກງານກວດກາລັດ, ວຽກງານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ວຽກງານແຈ້ງຊັບສິນ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງ ຂອງຂະແໜງການຕົນແຕ່ສູນກາງລົງຮອດທ້ອງຖິ່ນ ໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ບັນດາໂຄງການ, ແຜນງົບປະມານປະຈໍາປີ, ການຄຸ້ມຄອງ, ນໍາໃຊ້ຊັບສິນ, ເງິນກອງທຶນ, ເງິນກູ້ຢືມ, ເງິນຊ່ວຍເຫຼືອລ້າ ເພື່ອສະກັດກັ້ນປາກົດການລະເມີດ ມະຕິ, ຄໍາສັ່ງ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ, ຄຸ້ມຄອງ, ຕິດຕາມ, ກວດກາ, ເກັບກໍາຂໍ້ມູນການເຄື່ອນໄຫວ ແລະ ການແຈ້ງຊັບສິນຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງ ກະຊວງແຜນການ ແລະ ການລົງທຶນ;

20. ຄົ້ນຄວ້າ, ສະເໜີແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ພົນລະເມືອງທີ່ພົວພັນເຖິງວຽກງານ ແລະ ຄວາມຮັບຜິດຊອບ ຂອງກະຊວງແຜນການ ແລະ ການລົງທຶນ;
21. ຄຸ້ມຄອງບໍລິຫານການເງິນ, ຊັບສິນ ແລະ ເອກະສານຂອງກະຊວງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມ ການເຄື່ອນໄຫວວຽກງານ ຂອງກະຊວງແຜນການ ແລະ ການລົງທຶນໃຫ້ລັດຖະບານ, ນາຍົກລັດຖະມົນຕີ ເປັນແຕ່ລະໄລຍະ;
22. ຈັດຝຶກອົບຮົມ ດ້ານທິດສະດີການເມືອງ-ການປົກຄອງ ແລະ ດ້ານວິຊາການຕ່າງໆ ກ່ຽວກັບວຽກງານຂອງຂະແໜງແຜນການ ແລະ ການລົງທຶນ ເພື່ອຍົກສູງລະດັບ ຄວາມຮູ້, ຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງ ໃຫ້ພະນັກງານ-ລັດຖະກອນ ໃນການນຳພາ-ຊີ້ນຳ ແລະ ຈັດຕັ້ງປະຕິບັດວິຊາສະເພາະຂອງຂະແໜງແຜນການ ແລະ ການລົງທຶນ ໃນຂອບເຂດທົ່ວປະເທດ;
23. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຂອບເຂດສິດ ຂອງກະຊວງແຜນການ ແລະ ການລົງທຶນ ມີດັ່ງນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ລັດຖະບານ, ກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນໃນທົ່ວຂະແໜງແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
2. ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງຢ່າງລະອຽດ;
3. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການຂອງຂະແໜງແຜນການ ແລະ ການລົງທຶນ ເຂົ້າຮ່ວມປະຊຸມ ຫຼື ລາຍງານສ່ອງແສງວຽກງານ;
4. ແນະນຳ ແລະ ກຳນົດໝາຍເຕັກນິກ ເພື່ອຄຸ້ມຄອງມະຫາພາກ ວຽກງານຂະແໜງແຜນການ ແລະ ການລົງທຶນ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຂະແໜງແຜນການ ແລະ ການລົງທຶນ, ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດ ຂອງກະຊວງແຜນການ ແລະ ການລົງທຶນ;
6. ອະນຸມັດໃຫ້ຫ້ອງການ, ບັນດາກົມ, ສະຖາບັນ ຈັດກອງປະຊຸມ, ຝຶກອົບຮົມ ຫຼື ສຳມະນາທາງດ້ານວິຊາການ;

7. ສະເໜີແຜນການງົບປະມານ, ສ້າງແຜນລາຍຮັບ-ລາຍຈ່າຍ ແລະ ດັດແກ້ງົບປະມານຂອງກະຊວງແຜນການ ແລະ ການລົງທຶນ;
8. ສະເໜີລັດຖະບານພິຈາລະນາດັດແກ້ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານການລົງທຶນຂອງລັດ ໃນໄລຍະ 5ປີ ແລະ ປະຈຳປີ;
9. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ, ການພັດທະນາເຂດເສດຖະກິດພິເສດ ບົນພື້ນຖານກົດໝາຍ, ຂໍ້ກຳນົດ ແລະ ລະບຽບການທີ່ລັດຖະບານປະກາດໃຊ້ແຕ່ລະໄລຍະ;
10. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ ຈາກຄູ່ຮ່ວມພັດທະນາ ອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານແຜນການ ແລະ ການລົງທຶນ ແລະ ວຽກງານອື່ນໆ ຕາມການມອບໝາຍ ຫຼື ຕາມການອະນຸມັດຂອງລັດຖະບານ, ກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
11. ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານຂະແໜງແຜນການ ແລະ ການລົງທຶນ ໃຫ້ໄປຕາມລະບຽບ ແລະ ກົດໝາຍກຳນົດ;
12. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກ. ໂຄງປະກອບກົງຈັກຂອງກະຊວງແຜນການ ແລະ ການລົງທຶນ ປະກອບມີດັ່ງນີ້:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມແຜນການ;
5. ກົມປະເມີນຜົນ;
6. ກົມສົ່ງເສີມການລົງທຶນ;
7. ກົມຮ່ວມມືສາກົນ;
8. ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ;
9. ຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ;

10. ຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ;

11. ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ.

ພ້ອມນີ້ ມີສູນສະຖິຕິແຫ່ງຊາດ ມີຖານະ (ທຽບເທົ່າທະບວງ) ແລະ ມີບັນດາກົງຈັກຊ່ວຍວຽກ ຊຶ່ງມີດຳລັດກຳນົດໄວ້ສະເພາະ.

ຂ. ກົງຈັກການຈັດຕັ້ງຂັ້ນທ້ອງຖິ່ນຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ຂອງກະຊວງແຜນການ ແລະ ການລົງທຶນ ປະກອບມີດັ່ງນີ້:

1. ຂັ້ນແຂວງ: ມີພະແນກແຜນການ ແລະ ການລົງທຶນແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ມີຄະນະຄຸ້ມຄອງເຂດເສດຖະກິດພິເສດ (ສະເພາະແຂວງທີ່ມີເຂດເສດຖະກິດພິເສດ);

2. ຂັ້ນເມືອງ: ມີຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ ແລະ ນະຄອນ.

ການສ້າງຕັ້ງພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ ແລະ ຫ້ອງການແຜນການ ແລະ ການລົງທຶນຂັ້ນເມືອງ ແມ່ນມອບໃຫ້ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າພິຈາລະນາຕາມລະບຽບການ ແລະ ໃຫ້ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນຂອງກະຊວງແຜນການ ແລະ ການລົງທຶນ ປະກອບມີດັ່ງນີ້:

**ກ. ຂັ້ນກະຊວງ**

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ໃນການຄຸ້ມຄອງມະຫາພາກຕາມຂະແໜງການຕົນ ແລະ ຮັບຜິດຊອບ, ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

   ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ຮອງລັດຖະມົນຕີທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ.

2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີກະຊວງຕິດຂັດ.

3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

4. ສຳລັບບຸກຄະລາກອນຂອງສູນສະຖິຕິແຫ່ງຊາດ ແມ່ນກຳນົດໄວ້ໃນດຳລັດວ່າດ້ວຍການເຄື່ອນໄຫວຂອງສູນສະຖິຕິແຫ່ງຊາດ.

**ຂ. ຂັ້ນແຂວງ**

ມີຫົວໜ້າພະແນກ 1 ທ່ານ ແລະ ຮອງຫົວໜ້າພະແນກຈຳນວນໜຶ່ງ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ.

ມີຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ ປະຈຳແຂວງ, ນະຄອນຫຼວງ (ສະເພາະແຂວງທີ່ມີເຂດເສດຖະກິດພິເສດ) ມີຖານະທຽບເທົ່າຫົວໜ້າພະແນກການຂັ້ນແຂວງ, ມີຮອງຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດຈຳນວນໜຶ່ງ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ.

ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ ປະຈຳແຂວງ, ນະຄອນຫຼວງວຽງຈັນ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ.

**ຄ. ຂັ້ນເມືອງ**

ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ກະຊວງແຜນການ ແລະ ການລົງທຶນ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກະຊວງແຜນການ ແລະ ການລົງທຶນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງຄະນະນຳກະຊວງແຜນການ ແລະ ການລົງທຶນ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແລະ ຈັດຕັ້ງປະຕິບັດທິດທາງແຜນການ ທີ່ກະຊວງວາງອອກໃຫ້ໄດ້ຮັບຜົນດີ;

### ມາດຕາ 8 ແບບແຜນວິທີເຮັດວຽກ

ກະຊວງແຜນການ ແລະ ການລົງທຶນ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂະແໜງແຜນການ ແລະ ການລົງທຶນ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 9 ງົບປະມານ ແລະ ຕາປະທັບ

ກະຊວງແຜນການ ແລະ ການລົງທຶນ ມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບ ທີ່ກ່ຽວຂ້ອງກຳນົດ.

### ມາດຕາ 10 ການຜັນຂະຫຍາຍ

ມອບໃຫ້ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ບັນດາກົມ, ສະຖາບັນ, ກົງຈັກການຈັດຕັ້ງ ທີ່ຂຶ້ນກັບກະຊວງ ແລະ ພະແນກ ແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ແລະ ຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ, ນະຄອນ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

### ມາດຕາ 11 ການຈັດຕັ້ງປະຕິບັດ

ກະຊວງແຜນການ ແລະ ການລົງທຶນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 12 ຜົນສັກສິດ

ດຳລັດສະບັບນີ້ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນ

ໄຫວຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 682/ນຍ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງສູນສະຖິຕິແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍສະຖິຕິ ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1458/ກຜທ, ລົງວັນທີ 23 ສິງຫາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 212/ພນ, ລົງວັນທີ 08 ກັນຍາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສູນສະຖິຕິແຫ່ງຊາດ ແນໃສ່ການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາລະບົບສະຖິຕິແຫ່ງຊາດໃນຂອບເຂດທົ່ວປະເທດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສູນສະຖິຕິແຫ່ງຊາດ ຂຽນຫຍໍ້ວ່າ "ສຖຕ" ຂຽນເປັນພາສາອັງກິດ Lao Statistics Bureau ຂຽນຫຍໍ້ວ່າ "LSB" ມີຖານະທຽບເທົ່າທະບວງ ຂຶ້ນກັບ ກະຊວງແຜນການ ແລະ ການລົງທຶນ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ໃນການຄຸ້ມຄອງບໍລິຫານ ແລະ ພັດທະນາວຽກງານສະຖິຕິແຫ່ງຊາດ, ເປັນສູນກາງ ໃນການປະສານງານ, ການຜະລິດ, ການເຜີຍແຜ່ ແລະ ການສ້າງຖານຂໍ້ມູນສະຖິຕິທາງການ ຂອງລະບົບສະຖິຕິແຫ່ງຊາດ ຕາມຫຼັກການວິທະຍາສາດສະຖິຕິ ແລະ ຕາມຫຼັກການພື້ນຖານກ່ຽວກັບວຽກງານສະຖິຕິ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ໜ້າທີ່ ຂອງສູນສະຖິຕິແຫ່ງຊາດ ມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ເປັນເສນາທິການໃຫ້ ກະຊວງແຜນການ ແລະ ການລົງທຶນ ໃນການຄົ້ນຄວ້າ ສ້າງຮ່າງນະໂຍບາຍ, ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ, ຮ່າງ, ປັບປຸງ ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານສະຖິຕິ ເພື່ອສະເໜີລັດຖະບານພິຈາລະນາ;
3. ຄົ້ນຄວ້າ ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານສະຖິຕິມາເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປາກົດຜົນເປັນຈິງ;
4. ເປັນເຈົ້າການ ຄົ້ນຄວ້າ ແລະ ສ້າງແຜນ ດຳເນີນງານ ການສຳຫຼວດໃຫຍ່ ແລະ ການສຳຫຼວດແບບຕົວແທນລະດັບຊາດ ແລະ ແຜນງົບປະມານ ກ່ຽວກັບວຽກງານສະຖິຕິ ເພື່ອສະເໜີ ຕໍ່ກະຊວງແຜນການ ແລະ ການລົງທຶນ;
5. ສ້າງ, ພັດທະນາ ແລະ ຄຸ້ມຄອງ ຖານຂໍ້ມູນສະຖິຕິທາງການ ແລະ ສຳເນົາຖານຂໍ້ມູນສະຖິຕິ ທີ່ສັງລວມຈາກ ການສຳຫຼວດ, ການລາຍງານບໍລິຫານ, ສະຖິຕິການຂຶ້ນບັນຊີ ແລະ ສະຖິຕິການຂຶ້ນທະບຽນ ຈາກການຈັດຕັ້ງສະຖິຕິແຫ່ງຊາດ ແລະ ຫົວໜ່ວຍພື້ນຖານ;
6. ອອກແບບ ການສຳຫຼວດ, ການເກັບກຳຂໍ້ມູນຈາກການລາຍງານບໍລິຫານ ແລະ ການນຳໃຊ້ ລະບົບດິຈິຕອນ ແລະ ດີໂມດ ແຊນຊີງໃນການເກັບກຳຂໍ້ມູນ ທັງຫັນເປັນ ທັນສະໄໝ, ກຳນົດລະບົບຕົວຊີ້ບອກລະດັບຊາດ ໃນແຕ່ລະໄລຍະ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

7. ຄົ້ນຄວ້າ, ສ້າງ ແລະ ປັບປຸງລະບົບລະຫັດສາລະບານສະຖິຕິ ແລະ ຫຼັກວິທະຍາສາດດ້ານສະຖິຕິ ເພື່ອພັດທະນາລະບົບຖານຂໍ້ມູນເຊື່ອມໂຍງລະບົບສະຖິຕິແຫ່ງຊາດ, ສ້າງຕາຕະລາງ, ປື້ມຄູ່ມື ການເກັບກຳ, ສັງລວມ, ປຸງແຕ່ງ, ວິໄຈ ຂໍ້ມູນສະຖິຕິທາງການ ຈາກການລາຍງານ ບໍລິຫານ ແລະ ການສຳຫຼວດ;
8. ຄົ້ນຄວ້າ, ສ້າງ ແລະ ພັດທະນາເຄື່ອງມື, ຄູ່ມືທາງດ້ານວິຊາການ ແລະ ລະບົບຊຸດຂໍ້ມູນ ສຳລັບການສ້າງຖານຂໍ້ມູນສະຖິຕິທາງການ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;
9. ຄົ້ນຄວ້າ, ເກັບກຳ ແລະ ສ້າງ ສະຖິຕິການຂຶ້ນບັນຊີຫົວໜ່ວຍພື້ນຖານເສດຖະກິດ, ສະຖິຕິການຂຶ້ນບັນຊີຫົວໜ່ວຍການປົກຄອງ, ສະຖິຕິການຂຶ້ນບັນຊີຄົວເຮືອນ ແລະ ສະຖິຕິການຈົດນັບພົນລະເມືອງ, ສະຖິຕິການຂຶ້ນທະບຽນຫົວໜ່ວຍພື້ນຖານເສດຖະກິດ, ສະຖິຕິຂຶ້ນທະບຽນພົນລະເມືອງ ແລະ ສະຖິຕິການອອກບັດປະຈຳຕົວ ໂດຍຜ່ານລະບົບເຊື່ອມໂຍງຖານຂໍ້ມູນ ຂອງການລາຍງານບໍລິຫານຈາກທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;
10. ຄົ້ນຄວ້າ, ວິໄຈ, ຄິດໄລ່ ແລະ ຄາດຄະເນ ກ່ຽວກັບສະຖິຕິ ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ ແລະ ຄວາມໝັ້ນຄົງ ທາງດ້ານເສດຖະກິດ ແລະ ສັງຄົມ ເຊັ່ນ: ລວມຍອດຜະລິດຕະພັນພາຍໃນ, ລວມຍອດລາຍໄດ້ແຫ່ງຊາດໂດຍການສ້າງລະບົບບັນຊີແຫ່ງຊາດ, ລະບົບບັນຊີສະຖິຕິການທ່ອງທ່ຽວ, ສະຖິຕິລາຄາ ແລະ ອັດຕາເງິນເຟີ້, ສະຖິຕິການຄ້າລະຫວ່າງປະເທດ, ສະຖິຕິການລົງທຶນ, ສະຖິຕິພົນລະເມືອງ, ຄວາມທຸກຍາກ, ການຄ້ຳປະກັນສະບຽງອາຫານ, ສຸຂະພາບ ແລະ ໂພຊະນາການ, ການສຶກສາ, ສະພາບການມີວຽກເຮັດງານທຳ, ບົດບາດຍິງ-ຊາຍ ແລະ ຂໍ້ມູນການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນລະບົບເສດຖະກິດ ໂດຍການສ້າງລະບົບການບັນຊີສິ່ງແວດລ້ອມ ແລະ ສະຖິຕິ ອື່ນໆ;
11. ພັດທະນາ ແລະ ຄຸ້ມຄອງ ລະບົບໂຄງລ່າງພື້ນຖານໄອຊີທີ, ລະບົບເຄືອຄ່າຍດ້ານສະຖິຕິ ສຳລັບການເຊື່ອມຕໍ່ ແລະ ຖ່າຍໂອນຂໍ້ມູນສະຖິຕິ ແຕ່ສູນກາງຮອດທ້ອງຖິ່ນ;
12. ເປັນເຈົ້າການອອກແບບ ແລະ ພັດທະນາ ວຽກງານໂຄສະນາເຜີຍແຜ່ຂໍ້ມູນສະຖິຕິທາງການລະດັບຊາດ ໃຫ້ມີຄວາມທັນສະໄໝ ແລະ ສອດຄ່ອງກັບມາດຕະຖານສາກົນ ແນ່ໃສ່ການຕອບສະໜອງຄວາມຕ້ອງການຂອງຜູ້ຊົມໃຊ້ ດ້ວຍຫຼາຍຮູບແບບ ເຊັ່ນ: ການຈັດພິມ, ການຈັດກອງປະຊຸມ, ບົດລາຍງານສະຖິຕິ, ສື່ສິ່ງພິມຕ່າງໆ, ຜ່ານສື່ມວນຊົນ, ເວບໄຊ, ຜ່ານລະບົບເອເລັກໂຕນິກ ແລະ ໃນຮູບແບບອື່ນໆ;
13. ເກັບກຳ, ສັງລວມ, ທວງເອົາຂໍ້ມູນສະຖິຕິ ຈາກຫົວໜ່ວຍພື້ນຖານ ເພື່ອສ້າງເປັນບົດລາຍງານສະຖິຕິ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ;
14. ປະສານງານກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານສະຖິຕິ;

15. ຄົ້ນຄວ້າ, ສ້າງ ແລະ ຄຸ້ມຄອງນຳໃຊ້ ລະບົບ ໂປຣແກຣມ, ຊອບແວ, ເວບໄຊ ເພື່ອເຊື່ອມໂຍງ ແລະ ແລກປ່ຽນຂໍ້ມູນສະຖິຕິທາງການ ທັງພາຍໃນ ແລະ ຕ່າງປະເທດ;
16. ເປັນຈຸດປະສານງານໃນການຮ່ວມມືດ້ານສະຖິຕິ ກັບພາກພື້ນ, ສາກົນ ແລະ ຄູ່ຮ່ວມພັດທະນາ ໃນການຜະລິດສະຖິຕິ ຮັບປະກັນໃຫ້ມີຄວາມເປັນເອກະພາບ ແລະ ມາດຕະຖານຫຼັກວິທະຍາສາດດ້ານສະຖິຕິ ພ້ອມທັງຄົ້ນຄວ້າລະດົມແຫຼ່ງທຶນ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ເຂົ້າໃນການພັດທະນາລະບົບສະຖິຕິແຫ່ງຊາດ;
17. ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ບັນຈຸ, ຊັບຊ້ອນ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງ, ຍົກຍ້າຍ ແລະ ຮັບເອົາ ພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງສູນສະຖິຕິແຫ່ງຊາດ;
18. ສ້າງແຜນການຝຶກອົບຮົມ ແລະ ພັດທະນາ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ທາງດ້ານການຄຸ້ມຄອງບໍລິຫານວຽກງານສະຖິຕິ ແລະ ວິຊາການສະຖິຕິ ໃຫ້ແກ່ພະນັກງານ-ລັດຖະກອນ ໃນລະບົບການຈັດຕັ້ງສະຖິຕິແຫ່ງຊາດ ດ້ວຍຫຼາຍຮູບແບບ ທັງພາຍໃນ ແລະ ຕ່າງປະເທດ;
19. ຄົ້ນຄວ້າ ແລະ ສະເໜີ ປະຕິບັດນະໂຍບາຍຍ້ອງຍໍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ, ຄົ້ນຄວ້າການປະຕິບັດວິໄນຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍສະຖິຕິ ແລະ ລະບຽບການທີ່ກ່ຽວຂ້ອງ;
20. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍ, ຍຸດທະສາດ, ແຜນງານ, ໂຄງການສົ່ງເສີມທາງດ້ານວິຊາການ ແລະ ການຊ່ວຍເຫຼືອຈາກຕ່າງປະເທດ ໃນຂົງເຂດສະຖິຕິ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ໃນແຕ່ລະໄລຍະ ໃຫ້ບັນລຸຜົນສຳເລັດຕາມວັດຖຸປະສົງ ແລະ ຄາດໝາຍທີ່ກຳນົດໄວ້;
21. ຄຸ້ມຄອງ, ກວດກາ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດ ວຽກງານການຜະລິດ, ການເຜີຍແຜ່ສະຖິຕິທາງການ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໃຫ້ຖືກຕ້ອງກັບຫຼັກວິທະຍາສາດສະຖິຕິ;
22. ຄຸ້ມຄອງບໍລິຫານການເງິນ, ຊັບສິນ ແລະ ເອກະສານຂອງສູນສະຖິຕິແຫ່ງຊາດ ພ້ອມທັງຂຶ້ນແຜນ ແລະ ສະຫຼຸບລາຍງານ ງົບປະມານຂອງສູນສະຖິຕິແຫ່ງຊາດ ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນແຕ່ລະໄລຍະ;
23. ຄົ້ນຄວ້າ, ພິຈາລະນາ, ສະເໜີແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ, ຄຳສະເໜີຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ພົນລະເມືອງ ທີ່ພົວພັນເຖິງວຽກງານ ແລະ ຄວາມຮັບຜິດຊອບຂອງສູນສະຖິຕິແຫ່ງຊາດ;
24. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
25. ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ຂອບເຂດສິດ ຂອງສູນສະຖິຕິແຫ່ງຊາດ ມີດັ່ງນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຂອງສູນສະຖິຕິແຫ່ງຊາດ, ອອກຂໍ້ຕົກລົງບັນຈຸຊັບຊ້ອນພະນັກງານວິຊາການ ພາຍໃນສູນສະຖິຕິແຫ່ງຊາດ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດ ແລະ ການເຄື່ອນໄຫວວຽກງານສະຖິຕິ, ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງກັບພາລະບົດບາດຂອງ ສູນສະຖິຕິແຫ່ງຊາດ;
3. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດທາງດ້ານວິຊາການຕາມວິທີວິທະຍາສາດດ້ານສະຖິຕິ, ການຈັດຕັ້ງປະຕິບັດ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແລະ ແຜນດຳເນີນງານຂອງ ສູນສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;
4. ແຕ່ງຕັ້ງຄະນະຮັບຜິດຊອບ, ໜ່ວຍງານສະເພາະກິດ ເພື່ອຈັດຕັ້ງປະຕິບັດກິດຈະກຳ, ໂຄງການທີ່ກ່ຽວຂ້ອງກັບວຽກງານສະຖິຕິ, ອອກຂໍ້ຕົກລົງແຕ່ງຕັ້ງພະນັກງານ, ໜ່ວຍງານວິຊາການ, ຄະນະໂຄງການ ເພື່ອເຄື່ອນໄຫວວຽກງານສະຖິຕິ ຢູ່ພາຍໃນປະເທດ;
5. ຊີ້ນຳ, ຄຸ້ມຄອງ ໃນການຈັດຕັ້ງປະຕິບັດວຽກງານການຜະລິດ, ການເຜີຍແຜ່ສະຖິຕິທາງການລະດັບຊາດ ແລະ ໃຫ້ຄຳປຶກສາທາງດ້ານຫຼັກວິທະຍາສາດສະຖິຕິ ແກ່ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ແລະ ຫົວໜ່ວຍ ພື້ນຖານ ທີ່ມີການຜະລິດສະຖິຕິ;
6. ເປັນໃຈກາງປະສານສົມທົບ ກັບຂະແໜງການຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃນການຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານສະຖິຕິ;
7. ເຂົ້າເຖິງ, ນຳໃຊ້ ຖານຂໍ້ມູນທຸກປະເພດ ແລະ ທວງເອົາຂໍ້ມູນສະຖິຕິ ຂອງຫົວໜ່ວຍພື້ນຖານ ໂດຍປະສານສົມທົບ ກັບການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກຳ, ສັງລວມ, ຜະລິດ, ຈັດພິມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການໃນລະດັບຊາດ;
8. ປະກາດໃຊ້ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການລະດັບຊາດ ແລະ ຜົນການສຳຫຼວດຕ່າງໆ, ຈັດພິມຜະລິດຕະພັນສະຖິຕິ ແລະ ເອກະສານຮັບໃຊ້ການສຳຫຼວດຕ່າງໆ ພາຍໃຕ້ຄວາມຮັບຜິດຊອບຂອງສູນສະຖິຕິແຫ່ງຊາດ;

9. ເຊັນຮັບຮອງແຜນກິດຈະກຳ, ງົບປະມານ (ແຜນປະຈຳງວດ, ແຜນປະຈຳປີ ແລະ ການດັດແກ້ງົບປະມານ) ການເຄື່ອນໄຫວວຽກງານສະຖິຕິ ຂອງສູນສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ;
10. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດ ແຜນງົບປະມານ ແລະ ການສະຫຼຸບລາຍຈ່າຍງົບປະມານ ຕາມແຜນກິດຈະກຳສະຖິຕິ ທີ່ກຳນົດໄວ້ໃນແຜນການ ປະຈຳເດືອນ, ປະຈຳງວດ, ປະຈຳ ປີ, ຫ້າປີ ພາຍໃຕ້ຄວາມຮັບຜິດຊອບຂອງສູນສະຖິຕິແຫ່ງຊາດ;
11. ພົວພັນ, ຮ່ວມມື, ເຊັນສັນຍາ ແລະ ອະນຸສັນຍາ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານສະຖິຕິ ຕາມການມອບໝາຍຂອງລັດຖະບານ;
12. ປະຕິບັດສິດອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງສູນສະຖິຕິແຫ່ງຊາດ ປະກອບມີ:

1. ຫ້ອງການ;
2. ກົມສະຖິຕິເສດຖະກິດ;
3. ກົມສະຖິຕິສັງຄົມ;
4. ກົມສະຖິຕິສິ່ງແວດລ້ອມ ແລະ ຄວາມໝັ້ນຄົງ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນ ຂອງສູນສະຖິຕິແຫ່ງຊາດ ປະກອບມີ:

1. ຫົວໜ້າສູນສະຖິຕິແຫ່ງຊາດ 01 ທ່ານ ມີຖານະທຽບເທົ່າ ຮອງລັດຖະມົນຕີ ຮັບຜິດຊອບຕໍ່ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໃນການຄຸ້ມຄອງມະຫາພາກດ້ານວຽກງານສະຖິຕິ ໃນຂອບເຂດທົ່ວປະເທດ;

   ໃນເວລາຕິດຂັດ ຫົວໜ້າສູນສະຖິຕິແຫ່ງຊາດ ຕ້ອງມອບສິດໃຫ້ຮອງຫົວໜ້າສູນສະຖິຕິແຫ່ງຊາດ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ.
2. ຮອງຫົວໜ້າສູນສະຖິຕິແຫ່ງຊາດ ຈຳນວນໜຶ່ງ, ມີຕຳແໜ່ງບໍລິຫານປະເພດ 1, ເຊິ່ງມີໜ້າທີ່ຊ່ວຍຫົວໜ້າສູນສະຖິຕິແຫ່ງຊາດ ໃນການຊີ້ນຳວຽກງານຂອງຕົນ ແລະ ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍ ຂອງຫົວໜ້າສູນສະຖິຕິແຫ່ງຊາດ;

ຮອງຫົວໜ້າສູນສະຖິຕິແຫ່ງຊາດ ເປັນຜູ້ຮັກສາການແທນ ໃນເວລາຫົວໜ້າສູນສະຖິຕິແຫ່ງຊາດ ຕິດຂັດ;

3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຫົວໜ້າພະແນກ ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

# ໝວດທີ 4
# ຫຼັກການ ແລະ ແບບແຜນວິທີເຮັດວຽກ

## ມາດຕາ 7 ຫຼັກການ

ສູນສະຖິຕິແຫ່ງຊາດ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມ ຂອງສູນສະຖິຕິແຫ່ງຊາດ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງສູນສະຖິຕິແຫ່ງຊາດ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດ ຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

## ມາດຕາ 8 ແບບແຜນວິທີເຮັດວຽກ

1. ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການລະອຽດ ແລະ ມີກຳນົດເວລາ, ແກ້ໄຂວຽກງານຢ່າງມີຈຸດສຸມ, ມີການຈັດລຽງບູລິມະສິດ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງງານຂອງທຸກພາກສ່ວນ ເພື່ອພັດທະນາວຽກງານສະຖິຕິ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳອາທິດ, ກອງປະຊຸມ ສະຫຼຸບປະຈຳເດືອນ, 03 ເດືອນ, 06 ເດືອນປະຈຳປີ, ກອງປະຊຸມວິຊາການ, ແລະ ກອງປະຊຸມວິສາມັນຕ່າງໆ, ປະຕິບັດລະບອບລາຍງານວຽກບໍລິຫານປົກກະຕິ ແລະ ວຽກວິຊາການໃຫ້ ກະຊວງແຜນການ ແລະ ການລົງທຶນ, ສຳລັບບົດລາຍງານສະຖິຕິ, ການເຜີຍແຜ່ຂໍ້ມູນສະຖິຕິ, ການປະກາດຜົນການສຳຫຼວດ ແລະ ຜົນການຄົ້ນຄວ້າວິໄຈດ້ານສະຖິຕິ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍສະຖິຕິ ແລະ ລະບຽບການເຜີຍແຜ່ຂໍ້ມູນສະຖິຕິທາງການ;

4. ປະຕິບັດການພົວພັນ, ປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ສູນສະຖິຕິແຫ່ງຊາດ ມີງົບປະມານ ແລະ ຕາປະທັບ ເປັນຂອງຕົນເອງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 70 ແລະ 71 ຂອງກົດໝາຍວ່າດ້ວຍສະຖິຕິ ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017 ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ຄຸ້ມຄອງ ແລະ ກວດກາ ວຽກງານສະຖິຕິຕາມທີ່ໄດ້ກຳນົດໄວ້ໃນພາກ VII, ໝວດທີ 1 ແລະ ໝວດທີ 2, ມາດຕາ 58 ມາດຕາ 63 ຂອງກົດໝາຍວ່າດ້ວຍສະຖິຕິ;

ມອບໃຫ້ ຫົວໜ້າສູນສະຖິຕິແຫ່ງຊາດ ຄົ້ນຄ້ວາ ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບກົງຈັກຂອງຫ້ອງການ, ບັນດາກົມ ພາຍໃນສູນສະຖິຕິແຫ່ງຊາດ ຕາມຄວາມເໝາະສົມ ແລະ ນຳສະເໜີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຕົກລົງ;

ມອບໃຫ້ ລັດຖະມົນຕີ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງຂອງສູນສະຖິຕິປະຈຳກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງສະຖິຕິປະຈຳພະແນກ, ອົງການລັດທຽບເທົ່າພະແນກ ຂອງແຂວງ, ນະຄອນ ຫຼວງວຽງຈັນ, ໜ່ວຍງານສະຖິຕິປະຈຳຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງເມືອງ, ເທດສະ ບານ, ນະຄອນ ແລະ ຈຸງານສະຖິ ຕິຂອງຫົວຫນ່ວຍພື້ນຖານ ໃຫ້ສອດຄ່ອງກັບກົດຫມາຍວ່າດ້ວຍສະຖິຕິ ໃຫ້ຈະແຈ້ງ ແລະ ແທດເໝາະ ເພື່ອຮັບໃຊ້ໃຫ້ແກ່ການປັດຕິບັດວຽກງານໃຫ້ສອດຄ່ອງ ແລະ ໄດ້ຮັບຜົນດີ;

ການກຳນົດໄລຍະເວລາລາຍງານສະຖິຕິ ປະຈຳເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ມອບໃຫ້ສູນສະຖິຕິແຫ່ງຊາດ ອອກແຈ້ງການ ຫຼື ລະບຽບການຕ່າງຫາກ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ສູນສະຖິຕິແຫ່ງຊາດ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

ຂອງສູນສະຖິຕິແຫ່ງຊາດ ສະບັບເລກທີ 561/ນຍ, ລົງວັນທີ 31 ທັນວາ 2018 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 683 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ຄະນະກຳມະການຮ່ວມມືລາວ-ຈີນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ສັນຍາກ່ຽວກັບການສ້າງຕັ້ງຄະນະກຳມະການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລະຫວ່າງ ລັດຖະບານ ສປປ ລາວ ແລະ ສປ ຈີນ ສະບັບລົງວັນທີ 11 ມິຖຸນາ 1997;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1295/ກຜທ, ລົງວັນທີ 06 ສິງຫາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 299/ພນ, ລົງວັນທີ 30 ກັນຍາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຮ່ວມມືລາວ-ຈີນ ເພື່ອເປັນບ່ອນອີງໃຫ້ແກ່

ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ກັບ ສາທາລະນະລັດ ປະຊາຊົນຈີນ (ສປ ຈີນ) ບົນພື້ນຖານຂອງ ກົດໝາຍ ແລະ ນະໂຍບາຍຕ່າງປະເທດຂອງສອງປະເທດ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການຮ່ວມມືລາວ-ຈີນ ຂຽນເປັນຕົວອັກສອນຫຍໍ້ວ່າ "ຄລຈ" ແລະ ຂຽນເປັນພາສາອັງກິດ ວ່າ: Lao-China Cooperation Committee ໂດຍມີຊື່ຫຍໍ້ພາສາອັງກິດວ່າ: "LCCC" ແມ່ນອົງການຈັດຕັ້ງໜຶ່ງຂອງລັດຖະບານທີ່ເຄື່ອນໄຫວບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ ແລະ ລັດຖະບານ ໃນການຄົ້ນຄວ້າ, ປະສານງານ ແລະ ຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຮ່ວມມື ດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລະຫວ່າງ ສປປ ລາວ ກັບ ສປ ຈີນ.

## ໝວດທີ 2

### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ**

ຄະນະກຳມະການຮ່ວມມືລາວ-ຈີນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດນິຕິກຳ ຂອງປະທານປະເທດ, ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ ແລະ ນາຍົກລັດຖະມົນຕີ ວາງອອກຢ່າງເຂັ້ມງວດ;
2. ຄົ້ນຄວ້າ-ສັງລວມ ສະພາບ, ທ່າແຮງ ແລະ ເງື່ອນໄຂຄວາມສາມາດຕົວຈິງ ດ້ານເສດຖະກິດ, ການຄ້າ, ວິທະຍາສາດ-ເຕັກນິກ, ວັດທະນະທຳ-ສັງຄົມ ແລະ ອື່ນໆ ຂອງສອງຝ່າຍ ເພື່ອເປັນຂໍ້ມູນໃນການກຳນົດເປັນທິດທາງ, ຍຸດທະສາດ ແລະ ແຜນການຮ່ວມມື ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນແຕ່ລະໄລຍະ;
3. ຄົ້ນຄວ້າຮ່າງທິດທາງ-ນະໂຍບາຍ, ນິຕິກຳ, ຍຸດທະສາດ ແລະ ແຜນການ ທີ່ກ່ຽວກັບວຽກງານການຮ່ວມມືດ້ານເສດຖະກິດ-ການຄ້າ ແລະ ເຕັກນິກ ລະຫວ່າງ ສປປລາວ ກັບ ສປ ຈີນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ຈັດຕັ້ງພົບປະ, ປຶກສາຫາລື, ເຈລະຈາ ແລະ ຮ່ວມລົງນາມ ກ່ຽວກັບສັນຍາຮ່ວມມື ດ້ານເສດຖະກິດ, ເຕັກນິກ, ສານແລກປ່ຽນ, ບົດບັນທຶກ ແລະ ເອກະສານຮ່ວມມືຕ່າງໆ ກັບ ຄະນະກຳມະການຮ່ວມມືລາວ-ຈີນ, ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງ ສປ ຈີນ ຕາມແຜນການຮ່ວມມືຕ່າງໆ ທີ່ສອງຝ່າຍໄດ້ຕົກລົງເປັນເອກະພາບກັນ ໂດຍສອດຄ່ອງກັບກົດໝາຍຂອງສອງປະເທດ;

5. ນຳພາ-ຊີ້ນຳ ການປະຕິບັດກົນໄກຮ່ວມມືສະເພາະ ທີ່ລັດຖະບານສອງຝ່າຍຕົກລົງ ເຊັ່ນ: ກອງປະຊຸມຄະນະກຳມະການຮ່ວມມືຈີນ-ລາວ ແລະ ຈີນ-ລາວ, ກອງປະຊຸມຄະນະປະສານງານຮ່ວມມືພາກເໜືອລາວ ກັບ ແຂວງຢຸນນານ ສປ ຈີນ, ກອງປະຊຸມຄະນະກຳມະການຮ່ວມມືຈີນ-ລາວ ກັບ ອົງການຮ່ວມມືສາກົນ ເພື່ອການພັດທະນາແຫ່ງຊາດ ຈີນ (CIDCA) ແລະ ອື່ນໆ;
6. ຊຸກຍູ້, ຕິດຕາມພາກສ່ວນທີ່ກ່ຽວຂ້ອງຂອງສອງຝ່າຍ ໃນການຈັດຕັ້ງປະຕິບັດບັນດາແຜນແມ່ບົດ, ສັນຍາ, ບົດບັນທຶກ ແລະ ການຕົກລົງຕ່າງໆ ໃຫ້ສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້;
7. ນຳພາ-ຊີ້ນຳ ແລະ ຊຸກຍູ້ການຜັນຂະຫຍາຍ ຂອບການຮ່ວມມືວ່າດ້ວຍການຮ່ວມກັນພັດທະນາແລວທາງເສດຖະກິດ ລາວ-ຈີນ (ປີ 2019-2030);
8. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ການສະເໜີຂໍການຊ່ວຍເຫຼືອຈາກຂະແໜງການ ແລະ ທ້ອງຖິ່ນກ່ຽວກັບໂຄງການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ; ສະຫຼຸບຕີລາຄາການປະຕິບັດສັນຍາການນຳໃຊ້ແຫຼ່ງທຶນ ແລະ ປະເມີນຄືນການນຳໃຊ້ໂຄງການທີ່ສຳເລັດແລ້ວ ໃນແຕ່ລະໄລຍະ;
9. ເຂົ້າຮ່ວມໃນການຄົ້ນຄ້ວາ, ຕິດຕາມ ແລະ ຊຸກຍູ້ສົ່ງເສີມການລົງທຶນ ຂອງສອງຝ່າຍ;
10. ຈັດກອງປະຊຸມ, ສະຫຼຸບສັງລວມ, ຕີລາຄາສະພາບການ ແລະ ວາງແຜນການຈັດຕັ້ງປະຕິບັດການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ຂອງສອງຝ່າຍຢ່າງເປັນປົກກະຕິ ແລະ ລາຍງານໃຫ້ແກ່ສູນກາງພັກ ແລະ ລັດຖະບານ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ຄະນະກຳມະການຮ່ວມມືລາວ-ຈີນ ມີຂອບເຂດສິດ ດັ່ງນີ້:

1. ຄົ້ນຄ້ວາກ່ຽວກັບທິດທາງ, ນະໂຍບາຍ ແລະ ແຜນການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລະຫວ່າງ ສປປ ລາວ ກັບ ສປ ຈີນ ເພື່ອສະເໜີລັດຖະບານພິຈາລະນາຮັບຮອງ;
2. ພົວພັນ, ປຶກສາຫາລື, ເຈລະຈາ ແລະ ປະສານສົມທົບ ກັບ ຄະນະກຳມະການຮ່ວມມືຈີນ-ລາວ, ສະຖານທູດ ສປ ຈີນ ປະຈຳ ສປປ ລາວ, ການຈັດຕັ້ງທີ່ກ່ຽວຂ້ອງຂອງ ສປ ຈີນ ແລະ ສະຖານທູດ-ກົງສູນ ສປປ ລາວ ປະຈຳ ສປ ຈີນ;
3. ລົງນາມໃນສັນຍາ, ສານແລກປ່ຽນ, ບົດບັນທຶກ ແລະ ເອກະສານການຮ່ວມມືອື່ນໆ ຮ່ວມກັບຝ່າຍ ສປ ຈີນ ໂດຍສອດຄ່ອງກັບກົດໝາຍຂອງສອງປະເທດ;
4. ຊີ້ນຳ, ຕິດຕາມ, ຊຸກຍູ້ ແລະ ປຶກສາຫາລື ກັບ ບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງເສດຖະກິດ-ສັງຄົມຕ່າງໆ ເພື່ອວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ຂອງສອງຝ່າຍບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ;
5. ເຊັນໜັງສືທາງການ ເຖິງພາກສ່ວນທີ່ກ່ຽວຂ້ອງຂອງສອງຝ່າຍ ລາວ ແລະ ຈີນ ໂດຍກົງກ່ຽວກັບການປະຕິບັດວຽກງານຮ່ວມມືລາວ-ຈີນ;

6. ຄົ້ນຄ້ວາ, ສ້າງ ແລະ ປັບປຸງ ບັນດານິຕິກຳກ່ຽວກັບວຽກງານຮ່ວມມືລາວ-ຈີນ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແຕ່ລະໄລຍະ;
7. ຄົ້ນຄ້ວາ, ສະເໜີ ການຍ້ອງຍໍຊົມເຊີຍຕໍ່ ການຈັດຕັ້ງ ແລະ ບຸກຄົນ ຂອງຝ່າຍລາວ ແລະ ຝ່າຍຈີນ ທີ່ໄດ້ປະກອບສ່ວນ ແລະ ມີຜົນງານດີເດັ່ນ ຕໍ່ວຽກງານການຮ່ວມມືລາວ-ຈີນ;
8. ເຂົ້າຮ່ວມປຶກສາຫາລື, ເຈລະຈາ, ປະກອບຄຳເຫັນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ສອງຝ່າຍ ລາວ-ຈີນ ລວມທັງໂຄງການລົງທຶນ ຂອງ ສປ ຈີນ ຢູ່ ລາວ;
9. ສະເໜີ ການແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ສັງກັດໃນຄະນະກຳມະການຮ່ວມມືລາວ-ຈີນ ແລະ ຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ;
10. ຊີ້ນຳການຈັດຕັ້ງ ແລະ ການເຄື່ອນໄຫວຮອບດ້ານ ຂອງຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ;
11. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ຄະນະກຳມະການຮ່ວມມືລາວ-ຈີນ ມີຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ ເປັນກົງຈັກຊ່ວຍວຽກ, ຫ້ອງການດັ່ງກ່າວ ມີຖານະທຽບເທົ່າກົມ ແລະ ສັງກັດຢູ່ໃນໂຄງປະກອບກົງຈັກ ຂອງກະຊວງແຜນການ ແລະ ການລົງທຶນ.

ຫ້ອງການ ຫຼື ກົມກອງທີ່ຮັບຜິດຊອບວຽກພົວພັນກັບຕ່າງປະເທດ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການຈັດຕັ້ງມະຫາຊົນ ເປັນຈຸດປະສານງານວຽກງານການຮ່ວມມືລາວ-ຈີນ.

ພະແນກແຜນການ ແລະ ການລົງທຶນ ຂອງບັນດາແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບວຽກງານການຮ່ວມມື ລາວ-ຈີນ ຢູ່ທ້ອງຖິ່ນ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຮ່ວມມືລາວ-ຈີນ ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ປະກອບມີດັ່ງ:

1. ປະທານ (ລັດຖະມົນຕີ);
2. ຮອງປະທານ ຜູ້ປະຈຳການ 01 ທ່ານ (ມີຕຳແໜ່ງທຽບເທົ່າຮອງລັດຖະມົນຕີ);
3. ຮອງລັດຖະມົນຕີຂອງບັນດາກະຊວງ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຮອງເຈົ້າຄອງນະຄອນຫຼວງ ແລະ ຮອງເຈົ້າແຂວງ ຂອງບັນດາແຂວງ ເປັນຄະນະ;
4. ຫົວໜ້າຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ ເປັນຄະນະ ແລະ ເປັນເລຂາ.

# ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ຄະນະກຳມະການຮ່ວມມືລາວ-ຈີນ ເຄື່ອນໄຫວຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງຄະນະກຳມະການຮ່ວມມືລາວ-ຈີນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວຂອງຄະນະກຳມະການຮ່ວມມືລາວ-ຈີນ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ຄະນະກຳມະການຮ່ວມມືລາວ-ຈີນ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ;
2. ປະສານສົມທົບຢ່າງແໜ້ນແຟ້ນ ກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາການຮ່ວມມືລະຫວ່າງສອງຝ່າຍ ເປັນຕົ້ນ: ຮ່ວມກັນລົງກວດກາຕົວຈິງ ການຈັດຕັ້ງປະຕິບັດໂຄງການຮ່ວມມື ແລະ ການລົງທຶນ ຢ່າງເປັນປົກກະຕິ;
3. ເຮັດວຽກເປັນຄະນະ, ມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຖືເອົາລະບອບປະຊຸມເປັນການເຄື່ອນໄຫວວຽກງານຕົ້ນຕໍຂອງຄະນະ; ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
4. ຄະນະກຳມະການຮ່ວມມືລາວ-ຈີນ ເຄື່ອນໄຫວວຽກງານແບບບໍ່ປະຈຳການ, ປະຕິບັດລະບອບປະຊຸມ 6 ເດືອນ ແລະ ປະຈຳປີ ຫຼື ກອງປະຊຸມວິສາມັນ ໃນກໍລະນີຈຳເປັນ ຕາມການຮຽກເຊີນຂອງປະທານ ຫຼື ຕາມການສະເໜີຂອງຄະນະ ເພື່ອເປັນການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາປະເມີນຜົນໄດ້ຮັບ ຈາກການຈັດຕັ້ງປະຕິບັດແຜນການຮ່ວມມືສອງຝ່າຍ ເພື່ອລາຍງານສູນກາງພັກ ແລະ ລັດຖະບານ ຮັບຊາບ ຢ່າງເປັນປົກກະຕິ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ຄະນະກຳມະການຮ່ວມມືລາວ-ຈີນ ເປັນຫົວໜ່ວຍງົບປະມານການເງິນຂັ້ນສອງ ແລະ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ ໃຫ້ມີຄວາມລະອຽດ, ຈະແຈ້ງ, ຮັດກຸ່ມ ແລະ ເໝາະສົມ ເພື່ອຮັບໃຊ້ການປະຕິບັດວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ຄະນະກຳມະການຮ່ວມມືລາວ-ຈີນ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຮ່ວມມືລາວ-ຈີນ ສະບັບເລກທີ 350/ນຍ, ລົງວັນທີ 16 ພະຈິກ 2021 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 684/ນຍ

ນະຄອນຫຼວງວຽງຈັນ. ວັນທີ 27 ທັນວາ 2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຮ່ວມມືທະວິພາຄີລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສສ ຫວຽດນາມ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງເປັນເອກະພາບ ຂອງການພົບປະລະຫວ່າງ ສອງກົມການເມືອງສູນກາງພັກ ຄັ້ງວັນທີ 20 ມັງກອນ 2015; ບົດບັນທຶກກອງປະຊຸມຄັ້ງທີ 37 ແລະ ສັນຍາວ່າດ້ວຍການຮ່ວມມືທະວິພາຄີ ລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ສສ. ຫວຽດນາມ ຄັ້ງວັນທີ 21 ມັງກອນ 2015 ທີ່ນະຄອນຫຼວງຮ່າໂນ້ຍ;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1295/ກຜທ, ລົງວັນທີ 06 ສິງຫາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 299/ພນ, ລົງວັນທີ 30 ກັນຍາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຮ່ວມມືທະວິພາຄີ ລາວ-ຫວຽດນາມ ເພື່ອ

ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນ່ໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປະສານງານ, ຕິດຕາມ, ຊຸກຍູ້ສົ່ງເສີມການຮ່ວມມືລາວ-ຫວຽດນາມ ເພື່ອເສີມຂະຫຍາຍສາຍພົວພັນທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານກັບ ສສ.ຫວຽດນາມ ໃຫ້ປະກົດຜົນເປັນຈິງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ.ຫວຽດນາມ ມີຊື່ຫຍໍ້ວ່າ: "ຄະນະກຳມະການຮ່ວມມືລາວ-ຫວຽດນາມ" ຂຽນເປັນຕົວອັກສອນຫຍໍ້ວ່າ " ຄຮລ-ຫວ " ແມ່ນອົງການຈັດຕັ້ງໜຶ່ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ ແລະ ລັດຖະບານໃນການຄົ້ນຄ້ວາ, ຊີ້ນຳ ແລະ ປະສານງານກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບການຮ່ວມມືທະວິພາຄີລະຫວ່າງ ສປປ ລາວ ກັບ ສສ. ຫວຽດນາມ.

### ມາດຕາ 3 ການຮ່ວມມືທະວິພາຄີ ກັບ ສສ ຫວຽດນາມ

ການຮ່ວມທະວິພາຄີກັບ ສສ ຫວຽດນາມ ໝາຍເຖິງການຮ່ວມມືສອງຝ່າຍຢ່າງຮອບດ້ານ ລະຫວ່າງ ສປປ ລາວ ກັບ ສສ ຫວຽດນາມ ແນ່ໃສ່ການຈັດຕັ້ງປະຕິບັດບັນດາສັນຍາຮ່ວມມື ແລະ ຂໍ້ຕົກລົງຕ່າງໆ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ. ຫວຽດນາມ ໃນທຸກຂອບການຮ່ວມມື ແຕ່ລະໄລຍະ ໃຫ້ມີຄວາມເປັນເອກະພາບ, ວ່ອງໄວ ແລະ ທັນກັບເວລາ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 4 ໜ້າທີ່

ຄະນະກຳມະການຮ່ວມມືລາວ-ຫວຽດນາມ ມີໜ້າທີ່ ດັ່ງນີ້:

1. ປະຕິບັດນິຕິກຳ ຂອງປະທານປະເທດ, ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ ແລະ ນາຍົກລັດຖະມົນຕີ ວາງອອກຢ່າງເຂັ້ມງວດ;
2. ຄົ້ນຄ້ວາ ແລະ ເກັບກຳຂໍ້ມູນຢ່າງຮອບດ້ານ ກ່ຽວກັບວຽກງານການຮ່ວມມືກັບຝ່າຍຫວຽດນາມ; ປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຄົ້ນຄ້ວາກ່ຽວກັບທ່າແຮງ ແລະ ເງື່ອນໄຂຄວາມສາມາດຕົວຈິງຂອງຕົນ ເພື່ອກຳນົດທິດທາງ ແລະ ແຜນການຮ່ວມມືກັບ ສສ.ຫວຽດນາມ ໃນແຕ່ລະໄລຍະ ໃຫ້ມີປະສິດທິຜົນ ບົນພື້ນຖານສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນແຕ່ລະໄລຍະ;

3. ຄົ້ນຄ້ວາ, ນຳສະເໜີນາຍົກລັດຖະມົນຕີ, ລັດຖະບານ ເພື່ອພິຈາລະນາກ່ຽວກັບທິດທາງນະໂຍບາຍ, ວິທີການຮ່ວມມື ແລະ ການລົງທຶນ ລາວ-ຫວຽດນາມ ໃນແຕ່ລະໄລຍະ ພ້ອມທັງຊຸກຍູ້, ແນະນຳ, ຕິດຕາມ, ກວດກາ ການປະຕິບັດວຽກງານ ບັນດາກິດຈະການ, ໂຄງການ ໃຫ້ປະກົດຜົນເປັນຈິງ;
4. ຊ່ວຍນາຍົກລັດຖະມົນຕີ ໃນການຊີ້ນຳ, ປະສານງານກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງກ່ຽວກັບວຽກງານການຮ່ວມມື ແລະ ການລົງທຶນ ລາວ-ຫວຽດນາມ;
5. ປະສານສົມທົບ, ປຶກສາຫາລື ກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ເພື່ອຊຸກຍູ້ການເຮັດສັນຍາ, ຂໍ້ຕົກລົງກັບພາກສ່ວນທີ່ກ່ຽວຂ້ອງ ຂອງຝ່າຍ ຫວຽດນາມ ແນໃສ່ຍົກສູງປະສິດທິຜົນຂອງການຮ່ວມມື ແລະ ການລົງທຶນ ລະຫວ່າງສອງປະເທດ ບົນພື້ນຖານຄວາມສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ສອດຄ່ອງກັບກົດໝາຍ ຂອງແຕ່ລະປະເທດ ແລະ ລະບຽບການສາກົນ;
6. ຄົ້ນຄ້ວາຮ່າງແຜນການຮ່ວມມືປະຈຳແຕ່ລະປີ ສະເໜີຕໍ່ນາຍົກລັດຖະມົນຕີ, ລັດຖະບານ ແລະ ກົມການເມືອງສູນກາງພັກ ເພື່ອຂໍຄຳເຫັນຊີ້ນຳ ກ່ອນຈະນຳໄປປຶກສາຫາລື ກັບ ສສ.ຫວຽດນາມ;
7. ຊີ້ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ແລະ ໂຄງການລົງທຶນໃນຂົງເຂດຕ່າງໆ ທີ່ສອງລັດຖະບານໄດ້ຕົກລົງກັນ ພ້ອມທັງຕິດຕາມ, ຕີລາຄາປະສິດທິຜົນຂອງບັນດາໂຄງການລົງທຶນໃນຂົງເຂດຕ່າງໆ ທີ່ລົງທຶນລະຫວ່າງສອງຝ່າຍ ແລະ ລາຍງານໃຫ້ນາຍົກລັດຖະມົນຕີ, ລັດຖະບານ ແລະ ກົມການເມືອງສູນກາງພັກ ຊາບໃນແຕ່ລະໄລຍະ;
8. ປະສານສົມທົບ ຄະນະກຳມະການຮ່ວມມືຫວຽດນາມ-ລາວ ສສ ຫວຽດນາມ ເພື່ອຈັດຕັ້ງປະຕິບັດແຜນການຮ່ວມມື ທີ່ສອງຝ່າຍໄດ້ຕົກລົງເອກະພາບນຳກັນແລ້ວ; ສືບຕໍ່ປຶກສາຫາລືບັນດາທິດທາງແຜນການຮ່ວມມືໃນຕໍ່ໜ້າ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມີຈຸດສຸມ, ມີປະສິດທິຜົນສູງ; ພ້ອມນັ້ນກໍ່ກຳນົດ ວິທີການທີ່ເໝາະສົມ ເພື່ອຊຸກຍູ້ສົ່ງເສີມການຮ່ວມມື ແລະ ການລົງທຶນ ຕາມສັນຍາທີ່ລັດຖະບານທັງສອງຝ່າຍໄດ້ເຊັນຮ່ວມກັນ;
9. ສະຫຼຸບ, ສັງລວມລາຍງານສະພາບການຮ່ວມມືລະຫ່ວາງສອງຝ່າຍ ໃຫ້ແກ່ສູນກາງພັກ ແລະ ລັດຖະບານ ຊາບຢ່າງເປັນປົກກະຕິ ຫຼື ເວລາທີ່ຮີບດ່ວນ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 5 ຂອບເຂດສິດ**

ຄະນະກຳມະການຮ່ວມມືລາວ-ຫວຽດນາມ ມີຂອບເຂດສິດ ດັ່ງນີ້:

1. ຊີ້ນຳການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ;
2. ພົວພັນ, ປະສານງານ, ພົບປະເຈລະຈາ, ປຶກສາຫາລື ກັບຄະນະກຳມະການຮ່ວມມືຫວຽດນາມ-ລາວ ຕາມການມອບໝາຍຂອງນາຍົກລັດຖະມົນຕີ ແລະ ຕາມລະບຽບການທີ່ວ່າງອອກ;

3. ຮຽກເຊີນຕົວແທນຈາກ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງພັກ-ລັດຂັ້ນສູນກາງ, ຂະແໜງການ, ທ້ອງຖິ່ນຕ່າງໆ ແລະ ບັນດາວິສາຫະກິດ ຂອງທັງພາກລັດ ແລະ ເອກະຊົນມາລາຍງານ, ຮັບເອົາການຊີ້ນຳ ຫຼື ເຂົ້າຮ່ວມປະຊຸມສຳມະນາຕ່າງໆ ທີ່ຢູ່ໃນຂົງເຂດການພົວພັນຮ່ວມມື ແລະ ການລົງທຶນ ກັບ ສສ. ຫວຽດນາມ;
4. ຊຸກຍູ້, ຕິດຕາມ ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ທັງພາກລັດ ແລະ ເອກະຊົນໃນການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງຂອງ ສສ ຫວຽດນາມ;
5. ກວດຜ່ານເອກະສານໂຄງການຮ່ວມມື, ລົງທຶນກັບ ສສ ຫວຽດນາມ ກ່ອນກະຊວງ, ຂະແໜງການຈະອະນຸມັດ ຫຼື ກ່ອນສະເໜີລັດຖະບານ ພິຈາລະນາອະນຸມັດ;
6. ປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອປະເມີນຜົນ, ຕິດຕາມກວດກາບັນດາໂຄງການຮ່ວມມື ແລະ ການລົງທຶນໃນຂົງເຂດຕ່າງໆ ຂອງບັນດາວິສາວະກິດ ສສ ຫວຽດນາມ ທີ່ມາລົງທຶນຢູ່ ສປປ ລາວ ຢ່າງເປັນປົກກະຕິ;
7. ຕິດຕາມ ແລະ ຢັ້ງຢືນການນຳໃຊ້ທຶນຊ່ວຍເຫຼືອລ້າ ຈາກລັດຖະບານ ສສ ຫວຽດນາມ ໃຫ້ແກ່ລັດຖະບານ ສປປ ລາວ ຂອງແຕ່ລະປີ ແລະ ແຕ່ລະໄລຍະ;
8. ສະເໜີ ແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດນະໂຍບາຍ ຫຼື ປະຕິບັດວິໄນອື່ນໆ ຕໍ່ພະນັກງານ-ລັດຖະກອນ ທີ່ສັງກັດໃນຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ;
9. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 6 ໂຄງປະກອບກົງຈັກ

ຄະນະກຳມະການຮ່ວມມືທະວິພາຄີ ລາວ-ຫວຽດນາມ ມີຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ ເປັນກົງຈັກຊ່ວຍວຽກ, ຫ້ອງການດັ່ງກ່າວ ມີຖານະທຽບເທົ່າກົມ ແລະ ສັງກັດໃນໂຄງປະກອບກົງຈັກຂອງກະຊວງແຜນການ ແລະ ການລົງທຶນ;

ພະແນກແຜນການ ແລະ ການລົງທຶນ ຂອງບັນດາແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບວຽກງານການຮ່ວມມືລາວ-ຫວຽດນາມ ຢູ່ທ້ອງຖິ່ນ.

### ມາດຕາ 7 ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຮ່ວມມືລາວ-ຫວຽດນາມ ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ປະກອບມີ:

1. ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນປະທານ;

2. ຮອງປະທານ ຜູ້ປະຈຳການ 01 ທ່ານ (ມີຖານະທຽບເທົ່າຮອງລັດຖະມົນຕີ);
3. ຮອງລັດຖະມົນຕີ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ຂະແໜງການກ່ຽວຂ້ອງ ເປັນກຳມະການ;
4. ຫົວໜ້າຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ ເປັນກຳມະການ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 8 ຫຼັກການ

ຄະນະກຳມະການຮ່ວມມືລາວ-ຫວຽດນາມ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງຄະນະກຳມະການຮ່ວມມືລາວ-ຫວຽດນາມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວຂອງຄະນະກຳມະການຮ່ວມມືລາວ-ຫວຽດນາມ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 9 ແບບແຜນວິທີເຮັດວຽກ

ຄະນະກຳມະການຮ່ວມມືລາວ-ຫວຽດນາມ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ປະສານສົມທົບຢ່າງແໜ້ນແຟ້ນ ກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງງານຂອງທຸກພາກສ່ວນ ເພື່ອພັດທະນາການຮ່ວມມືລະຫ່ວາງສອງຝ່າຍ ເປັນຕົ້ນ: ຮ່ວມກັນລົງກວດກາຕົວຈິງ ການຈັດຕັ້ງປະຕິບັດບັນດາໂຄງການຮ່ວມມື ແລະ ການລົງທຶນ ຢ່າງເປັນປົກກະຕິ;
3. ເຮັດວຽກເປັນຄະນະ, ມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
4. ຄະນະກຳມະການຮ່ວມມືລາວ-ຫວຽດນາມ ປະຕິບັດລະບອບປະຊຸມປະຈຳ 6 ເດືອນ ແລະ ປະຈຳປີ ຫຼື ກອງປະຊຸມວິສາມັນ ໃນກໍລະນີຈຳເປັນ ຕາມການຮຽກເຊີນຂອງປະທານ ຫຼື ຕາມການສະເໜີຂອງກຳມະການ ເພື່ອເປັນການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາ

ຄາປະເມີນຜົນໄດ້ຮັບຈາກການຈັດຕັ້ງປະຕິບັດແຜນການຮ່ວມມືສອງຝ່າຍ ເພື່ອລາຍງານລັດຖະບານຊາບເປັນປົກກະຕິ;

5. ກອງປະຊຸມຄົບຄະນະຂອງຄະນະກຳມະການຮ່ວມມືລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຈັດຂຶ້ນປີລະ 1 ຄັ້ງ, ໂດຍແຕ່ລະຝ່າຍ ຜັດປ່ຽນກັນເປັນເຈົ້າພາບ ພາຍໃຕ້ການເປັນປະທານ ຂອງທ່ານນາຍົກລັດຖະມົນຕີທັງສອງປະເທດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 10 ງົບປະມານ ແລະ ຕາປະທັບ

ຄະນະກຳມະການຮ່ວມມືລາວ-ຫວຽດນາມ ເປັນຫົວໜ່ວຍງົບປະມານການເງິນຂັ້ນສອງ ແລະ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

### ມາດຕາ 11 ການຜັນຂະຫຍາຍ

ມອບໃຫ້ຄະນະກຳມະການຮ່ວມມືລາວ-ຫວຽມນາມ ສົມທົບກັບກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ ໃຫ້ມີຄວາມລະອຽດ, ຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ການປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ.

### ມາດຕາ 12 ການຈັດຕັ້ງປະຕິບັດ

ຄະນະກຳມະການຮ່ວມມືລາວ-ຫວຽດນາມ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 13 ຜົນສັກສິດ

ດຳລັດສະບັບນີ້ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຮ່ວມມືລາວ-ຫວຽດນາມ ສະບັບເລກທີ 23/ນຍ, ລົງວັນທີ 16 ມັງກອນ 2017 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 02 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02. 02. 2018.

# ຄໍາສັ່ງ
## ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດໍາເນີນທຸລະກິດ ຢູ່ ສປປ ລາວ

**ເຖິງ: ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາ ທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.**

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17/11/ 2016;
- ອີງຕາມ ບົດລາຍງານຂໍທິດຊີ້ນໍາກ່ຽວກັບການປັບປຸງບັນຍາກາດໃນການດໍາເນີນທຸລະກິດ ຂອງ ສປປ ລາວ ສະບັບເລກທີ 1825/ຜທ.ລທ2, ລົງວັນທີ 8 ກັນຍາ 2017;
- ອີງຕາມ ການຕົກລົງ ແລະ ຊີ້ນໍາ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈໍາເດືອນ ພະຈິກ 2017;
- ອີງຕາມ ໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3150/ກຜທ.ລທ2, ລົງວັນທີ 22 ທັນວາ 2017.

ເພື່ອປັບປຸງບັນຍາກາດໃນການດໍາເນີນທຸລະກິດ ຢູ່ ສປປ ລາວ ໃຫ້ດີຂຶ້ນ ແນໃສ່ຍາດແຍ່ງ ແລະ ດຶງດູດເອົາການລົງທຶນທີ່ມີຄຸນນະພາບ, ຊຸກຍູ້ສົ່ງເສີມ ແລະ ສ້າງຂີດຄວາມອາດສາມາດໃນການແຂ່ງຂັນຂອງທຸລະກິດພາຍໃນໃຫ້ສູງຂຶ້ນ ກໍຄືການແກ້ໄຂຄວາມຫຍຸ້ງຍາກຂອງການດໍາເນີນທຸລະກິດຢູ່ພາຍໃນປະເທດ ໃຫ້ຫຼຸດລົງແບບກ້າວກະໂດດ ໂດຍການຫຼຸດຜ່ອນ ຂັ້ນຕອນ ແລະ ເວລາໃນການອອກອະນຸຍາດຕ່າງໆ ຂອງຂະແໜງການທີ່ກ່ຽວຂ້ອງ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ມີຜົນສັກສິດ, ຫຼຸດຜ່ອນຕົ້ນທຶນໃນການດໍາເນີນກິດຈະການຂອງພາກທຸລະກິດ ແລະ ເຮັດໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດ ເຊື່ອໝັ້ນ ແລະ ຕັດສິນໃຈເຂົ້າມາດໍາ

ເງິນ ແລະ ຂະຫຍາຍທຸລະກິດຢູ່ປະເທດເຮົາ ໃຫ້ນັບມື້ນັບຫຼາຍ ກາຍເປັນກຳລັງແຮງທີ່ສຳຄັນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໃຫ້ບັນລຸຄາດໝາຍທີ່ວາງໄວ້, ສ້າງພື້ນຖານເສດຖະກິດແຫ່ງຊາດ ຂອງປະເທດເຮົາໃຫ້ເຕີບໂຕຢ່າງໜັກແໜ້ນໝັ້ນທ່ຽງ, ຕາມທິດຍືນຍົງ ແລະ ສີຂຽວ ທີ່ລະບຸໄວ້ໃນມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ່ X ຂອງພັກ.

## ນາຍົກລັດຖະມົນຕີອອກຄຳສັ່ງ:

1. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ທີ່ມີພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດ ທີ່ຕິດພັນໂດຍກົງກັບບັນດາຕົວຊີ້ວັດຄວາມສະດວກ ຂອງການດຳເນີນທຸລະກິດ ຢູ່ ສປປ ລາວ ຈັດຕັ້ງປະຕິບັດການແກ້ໄຂ, ຫຼຸດຂອດຂັ້ນ ແລະ ໄລຍະເວລາ ຂອງການອອກອະນຸຍາດຕ່າງໆ ໃນປີ 2018 ແລະ ປີ 2019 ດັ່ງນີ້:

**1.1 ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:**

(1) ຈັດຕັ້ງປະຕິບັດກົນໄກການບໍລິການລົງທຶນຜ່ານປະຕູດຽວ ໃຫ້ເປັນຮູບປະທຳໂດຍໄວ, ໂດຍປັບປຸງແກ້ໄຂຂອດການປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການຄົ້ນຄວ້າພິຈາລະນາອະນຸມັດເອກະສານການຂໍອະນຸຍາດລົງທຶນ ແລະ ການບໍລິການພາຍຫຼັງອອກໃບອະນຸຍາດລົງທຶນໃຫ້ລວມສູນ, ເປັນເອກະພາບ, ຫຼຸດຜ່ອນຂັ້ນຂອດ ແລະ ເວລາຂໍອະນຸຍາດລົງທຶນ ໃຫ້ສັ້ນເຂົ້າ ແຕ່ໃຫ້ໂປ່ງໃສ ແລະ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ລະບຽບການ; ໃຫ້ຫ້ອງການບໍລິການລົງທຶນປະຕູດຽວ, ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ສ້າງກົນໄກແຈ້ງໃຫ້ຜູ້ລົງທຶນຊາບຄວາມຄືບໜ້າ ຂອງການຄົ້ນຄວ້າພິຈາລະນາການສະເໜີຂອງຜູ້ລົງທຶນ.

(2) ເປັນໃຈກາງປະສານກັບຂະແໜງການກ່ຽວຂ້ອງ ເພື່ອຕິດຕາມຄວາມຄືບໜ້າໃນການແກ້ໄຂບັນດາຂອດຂັ້ນ ແລະ ຄວາມຫຍຸ້ງຍາກ ຕາມ 10 ຕົວຊີ້ວັດທີ່ທະນາຄານໂລກ ໄດ້ຍົກໃຫ້ເຫັນໃນບົດລາຍງານຂໍທິດຊີ້ນຳກ່ຽວກັບການປັບປຸງບັນຍາກາດໃນການດຳເນີນທຸລະກິດ ຂອງ ສປປ ລາວ ສະບັບເລກທີ 1825/ຜທ.ລທ2, ລົງວັນທີ 8 ກັນຍາ 2017, ແລ້ວລາຍງານຄວາມຄືບໜ້າໃນການປັບປຸງ-ແກ້ໄຂຕໍ່ກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ລັດຖະບານທຸກໆໄຕມາດ ແນ່ໃສ່ເຮັດໃຫ້ ອັນດັບ ຄວາມສະດວກໃນການດຳເນີນທຸລະກິດ ຂອງ ສປປ ລາວ ດີຂຶ້ນກວ່າເກົ່າໃນປີ 2019.

(3) ປັບປຸງກົນໄກການເຜີຍແຜ່ກົດໝາຍ ແລະ ບັນດານະໂຍບາຍ ກໍຄືລະບຽບການ ທີ່ກ່ຽວຂ້ອງກັບວຽງານການສົ່ງເສີມການລົງທຶນ.

**1.2 ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດ ດັ່ງນີ້:**

1.2.1. ເປັນເຈົ້າການປະສານກັບຂະແໜງການເງິນ, ຂະແໜງປ້ອງກັນຄວາມສະຫງົບ, ຂະແໜງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການທີ່ກ່ຽວຂ້ອງ ເລັ່ງປັບປຸງແກ້ໄຂຄວາມຫຍຸ້ງຍາກທີ່ພົວພັນ ກັບຕົວຊີ້ວັດ ທີ່ 1: ຕົວຊີ້ວັດ ການເລີ່ມຕົ້ນທຸລະກິດ ເປັນຕົ້ນແມ່ນ:

(1) ປັບປຸງລະບຽບການ, ມາດຕະການ ໃນການບໍລິການແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫຼື ນິຕິບຸກຄົນ) ໃຫ້ມີຄວາມສະດວກ, ກະທັດຮັດ ແລະ ວ່ອງໄວ. ພາຍຫຼັງຂຶ້ນທະບຽນສ້າງຕັ້ງວິສາຫະກິດ (ສ່ວນບຸກຄົນ ຫຼື ນິຕິບຸກຄົນ) ແລ້ວ, ກ່ອນຈະດຳເນີນທຸລະກິດໃດໜຶ່ງໄດ້ນັ້ນ ຕ້ອງຂໍອະນຸຍາດປະກອບທຸລະກິດນຳຂະແໜງການທີ່ກ່ຽວຂ້ອງກ່ອນ;

(2) ຄົ້ນຄວ້າປັບປຸງ ແລະ ປະກາດໃຊ້ບັນດານິຕິກຳທີ່ກ່ຽວຂ້ອງກັບການໃຫ້ບໍລິການແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ພາຍໃນໄຕມາດທີ່ໜຶ່ງ ຂອງປີ 2018;

(3) ກະກຽມສ້າງເງື່ອນໄຂທີ່ຈຳເປັນຕ່າງໆ ເພື່ອຂຶ້ນທະບຽນວິສາຫະກິດ ທາງອີເລັກໂຕຣນິກ (ຫຼືທະບຽນວິສາຫະກິດ Online) ໃຫ້ສຳເລັດ ພາຍໃນປີ 2019;

(4) ປະຕິບັດຂັ້ນຕອນການຈົດທະບຽນກົດລະບຽບ ແລະ ຂັ້ນຕອນການຈົດທະບຽນຊັບສິນ ຂອງວິສາຫະກິດ ໃຫ້ໄວຂຶ້ນກວ່າເກົ່າ ພາຍຫຼັງໄດ້ລະຫັດຜູ້ເສຍອາກອນ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດຕ່າງໆທີ່ກ່ຽວຂ້ອງຢ່າງຄົບຖ້ວນແລ້ວ;

(5) ປັບປຸງລະບົບການອອກລະຫັດຜູ້ເສຍອາກອນ ໂດຍໃຫ້ອອກພ້ອມກັນກັບການອອກທະບຽນວິສາຫະກິດ ແລະ ໃຫ້ຕັດປັບ ຫຼື ຕັດອອກຂັ້ນຂອດຕ່າງໆ ທີ່ບໍ່ຈຳເປັນ ເຊັ່ນ: ເອກະສານບັນຊີເງິນຝາກຂອງຜູ້ອຳນວຍການ, ບັນຊີພະນັກງານ, ເອກະສານສັນຍາເຊົ່າຫ້ອງການ ແລະ ອື່ນໆ ແຕ່ໃຫ້ວິສາຫະກິດ ສະໜອງເອກະສານໃນການດຳເນີນທຸລະກິດດັ່ງກ່າວໃຫ້ຄົບຖ້ວນພາຍຫຼັງທີ່ວິສາຫະກິດ ໄດ້ຮັບອະນຸຍາດໃນການລົງທຶນແລ້ວ;

(6) ປັບປຸງຂັ້ນຕອນການຄວັດຕາປະທັບ ໃຫ້ສອດຄ່ອງກັບ ມາດຕາ 21 (ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ;

(7) ລົບລ້າງການຂໍອະນຸຍາດຂຶ້ນປ້າຍສຳລັບວິສາຫະກິດ (ເນື່ອງຈາກເປັນປ້າຍກ່ຽວກັບການບອກຊື່ບໍ່ແມ່ນປ້າຍໂຄສະນາ), ແຕ່ໃຫ້ສ້າງລະບຽບການກຳນົດມາດຕະຖານປ້າຍສຳລັບວິສາຫະກິດໃຫ້ລະອຽດ (ຂະໜາດຂອງ ປ້າຍ, ຕົວໜັງສື, ສີພື້ນ ແລະ ລາຍລະອຽດອື່ນໆ) ແລະ ກຳນົດມາດຕະການໃນການຄຸ້ມຄອງ ເພື່ອໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ຜູ້ດຳເນີນທຸລະກິດຊາບ ແລະ ປະຕິບັດ ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ. ການສ້າງລະບຽບດັ່ງກ່າວ ກໍ່ໃຫ້ມີລັກສະນະຢືດຢຸ່ນ (ບໍ່ເຄັ່ງຄັດເກີນໄປ) ເພື່ອສະດວກໃຫ້ ຜູ້ປະກອບການໃນການຈັດຕັ້ງ

ປະຕິບັດ.

1.2.2. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທີ່ພົວພັນເຖິງໜ້າວຽກໃນຕົວຊີ້ວັດ ທີ່ 8: ຕົວຊີ້ວັດການຄ້າຂ້າມແດນ ປັບປຸງບັນດານິຕິກຳ ແລະ ຂັ້ນຕອນ ກ່ຽວກັບການຂໍອະນຸຍາດນຳເຂົ້າ-ສົ່ງອອກ ສິນຄ້າຂ້າມແດນ ໃຫ້ມີຄວາມສະດວກວ່ອງໄວເຮັດໃຫ້ຂະບວນການອະນຸຍາດນຳເຂົ້າ ແລະ ສົ່ງອອກ ສັ້ນເຂົ້າ ໂດຍແນໃສ່ເຮັດໃຫ້ໄລຍະເວລາໃນ ຂະບວນການນຳເຂົ້າ ແລະ ສົ່ງອອກ ຫຼຸດລົງໃຫ້ໄດ້ຢ່າງໜ້ອຍ 50% ໃນ ປີ 2019 ເປັນຕົ້ນແມ່ນ:

(1) ປະສານສົມທົບກັບ ຂະແໜງການເງິນ, ຂະແໜງສາທາລະນະສຸກ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງວິທະຍາສາດ ແລະ ເຕັກໂນໂລຢີ, ຂະແໜງພະລັງງານ ແລະ ບໍ່ແຮ່, ຂະແໜງຖະແຫຼງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ, ຂະແໜງທະນາຄານ ແລະ ຂະແໜງການອື່ນທີ່ ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າປຶກສາກັນເພື່ອຫຼຸດຂັ້ນຂອດ, ເວລາ ແລະ ເອກະສານ ທີ່ບໍ່ຈຳເປັນໃນການອະນຸຍາດການນຳເຂົ້າ ແລະ ສົ່ງອອກສິນຄ້າ ລົງຕື່ມ;

(2) ປະສານສົມທົບກັບຂະແໜງການເງິນ ປັບປຸງຂັ້ນຕອນດຳເນີນການແຈ້ງເອກະສານການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ທີ່ດ່ານຊາຍແດນ ໃຫ້ມີຄວາມກະທັດຮັດ ແລະ ວ່ອງໄວຂຶ້ນກວ່າເກົ່າ, ຂັ້ນຂອດໃດ ບໍ່ຈຳເປັນແມ່ນໃຫ້ ຕັດອອກ;

(3) ເປັນເຈົ້າການປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ກວດກາຄືນ ສິ່ງກີດຂວາງທາງດ້ານການຂົນສົ່ງພາຍໃນ ໂດຍສະເພາະ ການຕັ້ງດ່ານກວດກາຂອງເຈົ້າໜ້າທີ່ຕາມເສັ້ນທາງ ແລ້ວນຳສະເໜີເພື່ອລົບລ້າງ ດ່ານກວດກາ ທີ່ບໍ່ຈຳເປັນຕາມເສັ້ນທາງ.

**1.3 ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຕິບັດ ດັ່ງນີ້:**

ເປັນເຈົ້າການເລັ່ງປັບປຸງແກ້ໄຂຄວາມຫຍຸ້ງຍາກທີ່ພົວພັນກັບຕົວຊີ້ວັດທີ່ 2: ຕົວຊີ້ວັດການຂໍອະນຸຍາດປຸກສ້າງ ເປັນຕົ້ນແມ່ນ:

(1) ກວດກາບັນດາເອກະສານ ແລະ ເນື້ອໃນແບບຟອມການຂໍອະນຸຍາດປູກສ້າງຄືນໃໝ່, ເອກະສານໃດ ຫຼື ເນື້ອໃນໃດ ທີ່ບໍ່ຈຳເປັນ ແມ່ນໃຫ້ຕັດອອກ;

(2) ເອົາແບບຟອມການຂໍໃບອະນຸຍາດປຸກສ້າງ, ລວມທັງລະບຽບການຕ່າງໆທີ່ກ່ຽວຂ້ອງ ເຂົ້າໃນເວັບໄຊ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ໃນຕົ້ນປີ 2018 ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສະເໜີຂໍອະນຸຍາດປຸກສ້າງ, ບໍ່ຈຳເປັນຕ້ອງເຂົ້າໄປຊື້ແບບຟອມຢູ່ພະແນກການກ່ຽວຂ້ອງ;

(3) ຫຼຸດຜ່ອນ ຫຼື ຕັດຂັ້ນຕອນ ແລະ ເວລາ ໃນການຂໍອະນຸຍາດປຸກສ້າງທີ່ບໍ່ຈຳເປັນອອກ ຈາກ 11 ຂັ້ນຕອນໃຫ້ ຍັງເຫຼືອບໍ່ເກີນ 7 ຂັ້ນຕອນ ແລະ ຈາກ 83 ວັນ ໃຫ້ຍັງເຫຼືອບໍ່ເກີນ 45 ວັນ ໃນປີ 2018 ແລະ ບໍ່ເກີນ 30 ວັນ ໃນປີ 2019.

**1.4 ມອບໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ປະຕິບັດ ດັ່ງນີ້:**

ເປັນເຈົ້າການຊີ້ນຳລັດວິສາຫະກິດໄຟຟ້າລາວ ເລັ່ງປັບປຸງແກ້ໄຂຄວາມຫຍຸ້ງຍາກທີ່ພົວພັນກັບຕົວຊີ້ວັດທີ່ 3: ຕົວຊີ້ວັດການຕິດຕັ້ງໄຟຟ້າ ເປັນຕົ້ນແມ່ນ:

(1) ຫຼຸດຂັ້ນຕອນ ແລະ ໄລຍະເວລາ ການຕິດຕັ້ງໄຟຟ້າ ລົງຕື່ມ ຈາກທີ່ມີ 6 ຂັ້ນຕອນໃນປະຈຸບັນ ໃຫ້ເຫຼືອບໍ່ເກີນ 5 ຂັ້ນຕອນ ແລະ ຈາກ 134 ວັນ ໃຫ້ເຫຼືອບໍ່ເກີນ 50 ວັນ ໃນປີ 2018 ແລະ ບໍ່ເກີນ 40 ວັນ ໃນປີ 2019 ໂດຍສະເພາະສຳລັບບໍລິສັດຮັບເໝົາກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ, ໃຫ້ກຳນົດມາດຕະຖານ ແລະ ໄລຍະເວລາການໃຫ້ບໍລິການການຕິດຕັ້ງໄຟຟ້າ ລວມທັງການຕິດຕັ້ງໝໍ້ແປງ, ໂດຍສະເລ່ຍບໍ່ໃຫ້ເກີນ 30 ວັນ ໃນ ປີ 2018 ແລະ ບໍ່ເກີນ 25 ວັນໃນປີ 2019. ສຳລັບການກໍ່ສ້າງຕາຂ່າຍໄຟຟ້າທີ່ມີຄວາມແຮງ 22 ກວ ໃຫ້ປະຕິບັດຕາມເງື່ອນໄຂລວງຍາວ ແລະ ສິ່ງແວດລ້ອມ ຂອງແຕ່ລະໜ້າວຽກ.

(2) ຕິດຕາມ ແລະ ກວດກາມາດຕະຖານຂອງການບໍລິການ ຂອງບໍລິສັດທີ່ໃຫ້ບໍລິການການຕິດຕັ້ງໄຟຟ້າຢ່າງເຂັ້ມງວດ, ຖ້າຫາກພົບເຫັນການດຳເນີນການ ແລະ ບໍລິການຊັກຊ້າ ບໍ່ໄດ້ຕາມມາດຕະຖານ ໃຫ້ດຳເນີນມາດຕະການກ່າວເຕືອນ ແລະ ປະຕິບັດວິໄນ ໂດຍສະເໜີໃຫ້ຂະແໜງການກ່ຽວຂ້ອງ ຍົກເລີກໃບອະນຸຍາດດຳເນີນກິດຈະການບໍລິການຕິດຕັ້ງໄຟຟ້າຂອງບໍລິສັດດັ່ງກ່າວ.

(3) ຮີບຮ້ອນປັບປຸງລະບົບການສະໜອງໄຟຟ້າ ໃຫ້ມີສະຖຽນລະພາບ ແລະ ຮັບປະກັນບໍ່ໃຫ້ມີສະພາບໄຟຟ້າ ຕົກຢູ່ເລື້ອຍໆ ແນ່ໃສ່ເຮັດໃຫ້ດັດສະນີຄວາມສະຖຽນລະພາບຂອງການສະໜອງໄຟຟ້າ ແລະ ຄວາມໂປ່ງໃສ ຂອງອັດຕາຊົມໃຊ້ໄຟຟ້າຢູ່ ສປປ ລາວ ( Reliability of supply and transparency of Tariff Index of Lao PDR ) ມີອັນດັບທີ່ດີຂຶ້ນ.

**1.5 ມອບໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຕິບັດ ດັ່ງນີ້:**

ເປັນເຈົ້າການປັບປຸງແກ້ໄຂຄວາມຫຍຸ້ງຍາກທີ່ພົວພັນກັບຕົວຊີ້ວັດທີ່ 4: ຕົວຊີ້ວັດການຂຶ້ນທະບຽນຊັບສິນ ໂດຍປັບປຸງຂັ້ນຕອນ ແລະ ໄລຍະເວລາໃນການຂຶ້ນທະບຽນຊັບສິນທີ່ດິນ, ການໂອນກຳມະສິດນຳໃຊ້, ການເຊົ່າ, ການສຳປະທານ ທີ່ດິນໃຫ້ໄວຂຶ້ນ ໂດຍໃຫ້ຫຼຸດຂັ້ນຕອນເຫຼືອໜ້ອຍກວ່າ 4 ຂັ້ນຕອນ ແລະ ນຳໃຊ້ເວລາສັ້ນກວ່າ 53 ວັນ ໃນປີ 2018 ແລະ ສັ້ນກວ່າ 40 ວັນ ໃນປີ 2019.

**1.6 ມອບໃຫ້ ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:**

ເປັນເຈົ້າການປະສານກັບຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ ປັບປຸງແກ້ໄຂຄວາມຫຍຸ້ງຍາກທີ່ພົວພັນ ກັບ ຕົວຊີ້ ທີ່ 5. ຕົວຊີ້ວັດການເຂົ້າເຖິງສິນເຊື່ອ ແລະ ຕົວຊີ້ວັດທີ່ 6. ຕົວຊີ້ວັດການປົກປ້ອງນັກລົງທຶນຂະໜາດນ້ອຍ ແລະ ຜູ້ຖືຫຸ້ນສ່ວນນ້ອຍ ເປັນຕົ້ນແມ່ນ:

(1) ປັບປຸງດັດຊະນີວ່າດ້ວຍວຽກງານການເຂົ້າເຖິງສິນເຊື່ອໃຫ້ດີຂຶ້ນ ໂດຍສະເພາະດັດຊະນີຄວາມ

ເຂັ້ມແຂງຂອງກົດໝາຍ ແລະ ລະບຽບທີ່ປົກປ້ອງຜູ້ກູ້ຢືມ ແລະ ຜູ້ໃຫ້ຢືມ ໃຫ້ສູງກວ່າລະດັບ 6, ດັດຊະນີຄວາມສະດວກ ໃນການເຂົ້າເຖິງຂໍ້ມູນຂ່າວສານສິນເຊື່ອ ໃຫ້ສູງກວ່າລະດັບ 5, ອັດຕາການຄວບຄຸມຂອງລະບົບຖານຂໍ້ມູນຜູ້ກູ້ຂອງລັດ ໃຫ້ຕໍ່າກວ່າ 11,2% ແລະ ອັດຕາການຄວບຄຸມຂອງລະບົບຖານຂໍ້ມູນຜູ້ກູ້ຂອງເອກະຊົນ ໃຫ້ສູງ ກວ່າ 0%;

(2) ປັບປຸງດັດຊະນີຄຸນນະພາບຂອງກົດລະບຽບກ່ຽວກັບການຫ້າມບໍ່ໃຫ້ເກີດຜົນປະໂຫຍດທັບຊ້ອນທີ່ຢູ່ໃນ ລະດັບ 3,3 ໃຫ້ສູງຂຶ້ນກວ່າລະດັບ 4,3 ແລະ ດັດຊະນີຄຸນນະພາບຂອງການຄຸ້ມຄອງຜູ້ຖືຮຸ້ນທີ່ຢູ່ໃນລະດັບ 3 ໃຫ້ສູງຂຶ້ນກວ່າລະດັບ 6,3. ຄຽງຄູ່ກັນນັ້ນ, ກໍໃຫ້ຄະນະກໍາມະການຄຸ້ມຄອງຕະຫຼາດຫຼັກຊັບສືບຕໍ່ຄົ້ນຄວ້າ ແລະ ກໍານົດລະບຽບການໃນການຄຸ້ມຄອງບໍລິຫານ (Corporate Governance) ໃຫ້ສໍາເລັດໃນໄຕມາດທີ 2 ຂອງປີ 2018.

**1.7 ມອບໃຫ້ ກະຊວງ ການເງິນ ປະຕິບັດ ດັ່ງນີ້:**

(1) ເປັນເຈົ້າການເລັ່ງປັບປຸງແກ້ໄຂຄວາມຫຍຸ້ງຍາກທີ່ພົວພັນກັບຕົວຊີ້ວັດທີ່ 7: ຕົວຊີ້ວັດການເສຍອາກອນ, ໃນນັ້ນ ໃຫ້ຄົ້ນຄວ້າປັບປຸງຈໍານວນຄັ້ງ ແລະ ເວລາໃນການເສຍອາກອນຕ່າງໆ ຂອງບັນດາວິສາຫະກິດ, ໂດຍສະເໜີໃຫ້ມີການປັບປຸງກົດໝາຍທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ປັບປຸງຫຼຸດຈໍານວນຄັ້ງໃນການຊໍາລະອາກອນກໍາໄລ 4 ຄັ້ງຕໍ່ປີ ໃຫ້ເຫຼືອ 1 ຄັ້ງຕໍ່ປີ ແລະ ປັບປຸງກົນໄກການຊໍາລະອາກອນປະກັນສັງຄົມໃຫ້ສະດວກ ແລະ ວ່ອງໄວກ່ວາເກົ່າ. ພ້ອມກັນນັ້ນ, ກໍໃຫ້ພະຍາຍາມຫຼຸດເວລາໃນການຊໍາລະອາກອນ ຈາກ 182 ຊົ່ວໂມງ/ປີ ໃຫ້ເຫຼືອ ໜ້ອຍທີ່ສຸດ.

(2) ປັບປຸງຂັ້ນຕອນການເກັບພາສີ-ອາກອນ ໃນເວລາການນໍາເຂົ້າສິນຄ້າທີ່ດ່ານຊາຍແດນໃຫ້ມີຄວາມກະທັດຮັດ ແລະ ວ່ອງໄວກວ່າເກົ່າ.

**1.8 ມອບໃຫ້ ກະຊວງຍຸຕິທໍາ ແລະ ອົງການຕຸລາການ ປະຕິບັດ ດັ່ງນີ້:**

ເປັນເຈົ້າການ ຄົ້ນຄວ້າສ້າງ ແລະ ປັບປຸງບັນດານິຕິກໍາທີ່ພົວພັນກັບ ຕົວຊີ້ວັດທີ 9. ຕົວຊີວັດການບັງຄັບໃຊ້ສັນຍາ ແລະ ຕົວຊີ້ວັດທີ່ 10: ຕົວຊີ້ວັດການແກ້ໄຂບັນຫາການລົ້ມລະລາຍ ຕາມພາລະບົດບາດເປັນຕົ້ນແມ່ນ:

(1) ປັບປຸງໄລຍະເວລາຂອງຂະບວນການດໍາເນີນຄະດີ ເພື່ອໃຫ້ປະຕິບັດຕາມສັນຍາໃຫ້ຫຼຸດ 443 ວັນ, ອັດຕາຄ່າໃຊ້ຈ່າຍຂອງຂະບວນການດໍາເນີນຄະດີເພື່ອໃຫ້ປະຕິບັດຕາມສັນຍາໃຫ້ຫຼຸດ 31,6% ຂອງມູນຄ່າສັນຍາ ແລະ ປັບປຸງດັດຊະນີຄຸນນະພາບ ຂອງຂະບວນການທາງສານໃຫ້ສູງກ່ວາລະດັບ 5,5.

(2) ຮີບຮ້ອນສົມທົບກັບກະຊວງກ່ຽວຂ້ອງ ປັບປຸງກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດສະບັບເລກທີ 06/94, ລົງວັນທີ 14 ຕຸລາ 1994.

**1.9 ມອບໃຫ້ ກະຊວງປ້ອງກັນຄວາມສະຫງົບ ປະຕິບັດ ດັ່ງນີ້:**

ຄົ້ນຄວ້າຫຼຸດຂັ້ນຕອນ ແລະ ໄລຍະເວລາ ການອອກຕາປະທັບ ເພື່ອການດຳເນີນທຸລະກິດ ໃຫ້ສັ້ນລົງຕື່ມ, ນັບແຕ່ປີ 2018 ເພື່ອໃຫ້ການອອກຕາປະທັບໄວຂຶ້ນ, ໃຫ້ກະຊວງປ້ອງກັນຄວາມສະຫງົບ ມອບຄວາມຮັບຜິດຊອບໃຫ້ກອງບັນຊາການປ້ອງກັນຄວາມສະຫງົບນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເປັນຜູ້ຜະລິດຕາປະທັບທຸລະກິດ ໂດຍໃຫ້ກະຊວງປ້ອງກັນຄວາມສະງົບ ກຳນົດລະບຽບ ແລະ ມີບົດແນະນຳໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ຮັດກຸມ ແລະ ວ່ອງໄວ.

**1.10 ມອບໃຫ້ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ປະຕິບັດ ດັ່ງນີ້:**

ເປັນເຈົ້າການປະກອບສ່ວນເຂົ້າໃນຂະບວນການຄົ້ນຄ້ວາ ແລະ ປັບປຸງແກ້ໄຂຄວາມຫຍຸ້ງຍາກຕ່າງໆ ທີ່ພົວພັນກັບການຈັດອັນດັບຄວາມສະດວກໃນການດຳເນີນທຸລະກິດຢູ່ລາວ ຕາມພາລະບົດບາດເປັນຕົ້ນແມ່ນ:

(1) ປະກອບຄຳຄິດຄຳເຫັນ ແລະ ເຂົ້າຮ່ວມຢ່າງຕັ້ງໜ້າໃນການປັບປຸງບັນຍາກາດການລົງທຶນ ຢູ່ ສປປ ລາວ.

(2) ໂຄສະນາເຜີຍແຜ່ ແລະ ແນະນຳກ່ຽວກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດ ໃນການປັບປຸງອຳນວຍຄວາມສະດວກ ໃຫ້ແກ່ການດຳເນີນທຸລະກິດ ຢູ່ ສປປ ລາວ ໃຫ້ບັນດາສະມາຊິກທີ່ຂຶ້ນກັບຕົນເຂົ້າໃຈເປັນເອກະພາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

(3) ເປັນເຈົ້າການໃນການສັງລວມບັນຫາ ແລະ ຄຳສະເໜີຂອງພາກທຸລະກິດໃນແຕ່ລະໄລຍະ ພ້ອມທັງລະດົມສະໝອງ ແລະ ສະເໜີທິດທາງ, ວິທີແກ້ໄຂຢ່າງສ້າງສັນ ເພື່ອໃຫ້ລັດຖະບານ ຄົ້ນຄ້ວາພິຈາລະນາ.

**1.11. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ກ່າວມາຂ້າງເທິງ:**

1. ແຕ່ງຕັ້ງໜ່ວຍງານຮັບຜິດຊອບ ໂດຍມີຮອງຫົວໜ້າກົມຂອງຕົນ ເປັນຜູ້ລົງເລິກຊີ້ນຳການຄົ້ນຄ້ວາສ້າງແຜນດຳເນີນງານ ແລະ ປັບປຸງແຕ່ລະຕົວຊີ້ວັດທີ່ພົວພັນກັບພາລະບົດບາດຂອງຕົນ ແລະ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ສັງລວມເປັນແຜນດຳເນີນງານໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ເພື່ອໃຫ້ສາມາດຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ.

2. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ທີ່ມີພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດ ທີ່ປິ່ນອ້ອມກັບການຈັດຕັ້ງປະຕິບັດບັນດາຕົວຊີ້ວັດຄວາມສະດວກ ຂອງການດຳເນີນທຸລະກິດ ຢູ່ ສປປ ລາວ ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດການແກ້ໄຂ, ຫຼຸດຂອດຂັ້ນ ແລະ ໄລຍະເວລາ ຂອງການອອກອະນຸຍາດຕ່າງໆ.

3. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງ ສະບັບນີ້ ແລະ ສະຫຼຸບລາຍງານລັດຖະບານຊາບ ໃນໄລຍະ 3 ເດືອນ, 6 ເດືອນ ແລະ 1 ປີ.

4. ພາຍຫຼັງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ປັບປຸງລະບຽບການສຳເລັດ ແລະ ມີລະບຽບການເອກະພາບແລ້ວ ມອບໃຫ້ອົງການປົກຄອງທ້ອງຖິ່ນ ສຸມໃສ່ປັບປຸງຂັ້ນຂອດ ແລະ ໄລຍະເວລາຂໍອະນຸຍາດດຳເນີນທຸລະກິດ ຢູ່ທ້ອງຖິ່ນຂອງຕົນ ໃຫ້ກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ສາມາດກວດສອບໄດ້.

5. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

6. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 08 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02 .07. 2018

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ກິດຈະການແຮ່ທາດ ໃນ ສປປ ລາວ

ເຖິງ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າ, ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ທ່ານ ເຈົ້າແຂວງໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຄຳສັ່ງວ່າດ້ວຍການໂຈະການພິຈາລະນາໂຄງການໃໝ່ ສຳລັບການຊອກຄົ້ນ ແລະ ສຳຫຼວດ, ການປູກຢາງພາລາ ແລະ ໄມ້ວິກໃນຂອບເຂດທົ່ວປະເທດ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນທັນວາ 2015 ສະບັບເລກທີ 12/ລບ, ລົງວັນທີ 31 ທັນວາ 2015;
- ອີງຕາມ ການຊີ້ນຳ ແລະ ຕົກລົງ ໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 04-05 ກໍລະກົດ 2017;

- ອີງຕາມ ໜັງສືສະເໜີ ສະບັບເລກທີ 0989/ກຜທ.ລທ5, ລົງວັນທີ 03 ພຶດສະພາ 2018 ຂອງ ກະຊວງແຜນການ ແລະ ການລົງທຶນ.

ຜ່ານການຈັດຕັ້ງປະຕິບັດ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012, ລັດຖະບານເຫັນໄດ້ວ່າການພັດທະນາດ້ານບໍ່ແຮ່ ໄດ້ນໍາຜົນປະໂຫຍດມາໃຫ້ແກ່ປະເທດຊາດ ກໍຄືໄດ້ ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມດີພໍສົມຄວນໃນໄລຍະຜ່ານມາ, ເຖິງຢ່າງໃດກໍຕາມ ເພື່ອ ເຮັດໃຫ້ການດໍາເນີນທຸລະກິດ ກ່ຽວກັບແຮ່ທາດ ໃນ ສປປ ລາວ ຮັບປະກັນໄດ້ປະສິດທິຜາບ ແລະ ໄປຕາມ ທິດສີຂຽວ ແລະ ຍືນຍົງ ຕ້ອງເພີ່ມທະວີການຄຸ້ມຄອງກິດຈະການບໍ່ແຮ່ໃນທົ່ວປະເທດໃຫ້ມີຄວາມຮັດກຸມ ແລະ ມີປະສິດທິຜາບສູງກວ່າເກົ່າ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ:

1. ໃຫ້ສືບຕໍ່ໂຈະການພິຈາລະນາອະນຸຍາດ ໂຄງການລົງທຶນໃໝ່ ສໍາລັບການຂຸດຄົ້ນ ແລະ ສໍາຫຼວດແຮ່ ທາດ, ການຂຸດຄົ້ນຄໍາຕົກຂ້ອນ ຕາມສາຍນໍ້າ ແລະ ເທິງບົກ ໃນຂອບເຂດທົ່ວປະເທດ ຈົນຮອດວັນ ທີ 31 ທັນວາ 2020, ຍົກເວັ້ນແຕ່ກໍລະນີ ດັ່ງຕໍ່ໄປນີ້:

   1.1 ປະເພດແຮ່ທາດ ທີ່ຈໍາເປັນ ເພື່ອຮັບໃຊ້ອຸດສາຫະກໍາ ແລະ ການກໍ່ສ້າງ ມີດັ່ງນີ້:

   - ແຮ່ທາດອະໂລຫະ ສໍາລັບອຸດສາຫະກໍາ: ຫີນປູນ, ຫີນກຣານິດ, ລາເຕຣິດ, ຫີນອັງເດຊິດ, ຫີນ ກາໂບຣ, ຫີນໂດໂລມິດ, ຫີນອາໂດເບ, ຫີນແຊກປັງຕິນ, ອາລຸນິດ, ມາດ, ໂຟດສະຟັດ, ກາວ ແລງ, ແຟວສະປາ, ກຣາຟິດ, ໄມກາ, ຊາຍຜະລິດແກ້ວ, ກວັກສ໌, ຫີນຊາຍ, ຫີນໄນສ໌, ຫີນ ແຮ່,ຊາຍ, ຫີນແປັກມາຕິດ, ຫີນຣີໂອລິດ, ຫີນ ສະເລດ ແລະ ດິນໜຽວ.
   - ແຮ່ທາດອະໂລຫະ ສໍາລັບການກໍ່ສ້າງ : ຫີນບາຊານ, ຫີນໂດໂລມິດ, ຫີນກາໂບຣ, ຫີນກຣາ ນິດ, ຫີນໄນສ໌, ຫີນອັງເດຊິດ, ຫີນຣີໂອລິດ, ຫີນຊາຍ, ຫີນລາເຕຣິດ, ຫີນແຮ່, ຊາຍ ແລະ ຫີນມາໂບ.
   - ໝວດແຮ່ທາດພະລັງງານເຊື້ອໄຟ : ຖ່ານຫີນ, ຫີນແຜ່ນທີ່ໃຫ້ພະລັງງານເຜົາໄໝ້, ນໍ້າມັນດິບ ແລະ ອາຍແກ໊ສທໍາມະຊາດ.
   - ໝວດແຮ່ທາດແຫຼວ : ນໍ້າແຮ່ຮ້ອນ ແລະ ນໍ້າແຮ່ທາດ.

   1.2 ສໍາລັບບັນດາໂຄງການໃດ ທີ່ລັດຖະບານໄດ້ຍົກເລີກ ຫຼື ສິ້ນສຸດສັນຍາແລ້ວ ຖ້າຫາກມີບໍລິສັດ ໃໝ່ ມີຄວາມສົນໃຈຢາກສືບຕໍ່ ແມ່ນລັດຖະບານ ຈະພິຈາລະນາເປັນແຕ່ລະກໍລະນີ ໂດຍ ສອດຄ່ອງກັບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍແຮ່ທາດ.

   1.3 ນອກຈາກປະເພດແຮ່ທາດ ທີ່ລະບຸໄວ້ໃນຂໍ້ 1.1 ຂ້າງເທິງ, ລັດຖະບານ ຈະພິຈາລະນາເປັນແຕ່

ລະກຳລະນີ ສະເພາະ, ສຳລັບຜູ້ລົງທຶນ ທີ່ມີຄວາມສາມາດທາງການເງິນ, ມີປະສົບການລົງທຶນດ້ານບໍ່ແຮ່, ມີໂຮງງານປຸງແຕ່ງແຮ່ ເປັນຜະລິດຕະພັນສຳເລັດຮູບ ເພື່ອສົ່ງອອກ, ມີຊື່ສຽງ, ມີປະຫວັດການເຄື່ອນໄຫວທີ່ດີ ແລະ ເປັນທີ່ຮັບຮູ້ໃນອຸດສາຫະກຳແຮ່ທາດສາກົນ.

2. ປະເພດແຮ່ທາດ ທີ່ຫ້າມບໍ່ໃຫ້ສົ່ງອອກ ມີຄື : ຖ່ານຫີນ, ໂຟດສະຟັດ ຍົກເວັ້ນແຕ່ບັນດາໂຄງການໃດທີ່ມີສັນຍາສຳປະທານຂຸດຄົ້ນ ກ່ອນຄຳສັ່ງສະບັບນີ້ ແລະ ໃຫ້ຫຼຸດຜ່ອນການສົ່ງອອກແຮ່ທາດ ທີ່ບໍ່ໄດ້ຜ່ານການປຸງແຕ່ງ (ແຮ່ດິບ) ເປັນຕົ້ນແມ່ນ ແຮ່ບາຣິດ ແລະ ຫີນກາວ.

3. ສຳລັບບັນດາໂຄງການທີ່ມີສັນຍາສຳປະທານກັບລັດຖະບານ ທີ່ມີຜົນຂອງການກວດກາ ຕາມຄຳສັ່ງເລກທີ 13/ນຍ ຜ່ານມາແລ້ວນັ້ນ, ມອບໃຫ້ຄະນະຈັດຕັ້ງປະຕິບັດ ຄຳສັ່ງເລກທີ 13/ນຍ ຂັ້ນສູນກາງ ຄົ້ນຄວ້ານຳສະເໜີການປະຕິບັດມາດຕະການຂັ້ນເດັດຂາດ ຕາມກົດໝາຍ, ລະບຽບການ ແລະ ສັນຍາສຳປະທານ ທີ່ກ່ຽວຂ້ອງກຳນົດ. ໃຫ້ຄັດຈ້ອນເອົາແຕ່ສະເພາະໂຄງການທີ່ດີ ແລະ ຈະສ້າງຜົນປະໂຫຍດຕໍ່ປະເທດຊາດໄວ້. ສ່ວນໂຄງການໃດທີ່ບໍ່ມີການປັບປຸງຕົນເອງ ແລະ ສືບຕໍ່ລະເມີດກົດໝາຍ, ລະບຽບການ ແລະ ສັນຍາສຳປະທານ ເປັນຕົ້ນແມ່ນ ບໍ່ປະຕິບັດພັນທະ, ບໍ່ເຄື່ອນໄຫວວຽກງານ, ແກ່ຍາວເວລາ, ປະຕິບັດວຽກງານຂ້າມຂັ້ນຕອນ ທີ່ສ້າງຄວາມເສຍຫາຍແກ່ປະເທດຊາດ ແມ່ນໃຫ້ຄົ້ນຄ້ວານຳສະເໜີລັດຖະບານ ເພື່ອຕົກລົງຍົກເລີກສັນຍາສຳປະທານ ຢ່າງເດັດຂາດ ຫ້າມບໍ່ໃຫ້ໂຄງການທີ່ຖືກຍົກເລີກໄປແລ້ວນັ້ນ ນຳສະເໜີຫາພາກສ່ວນອື່ນເພື່ອເອົາໂຄງການຄືນ ທີ່ເປັນການສ້າງຄວາມສັບສົນໃຫ້ແກ່ລັດຖະບານ. ຫ້າມເດັດຂາດບໍ່ອະນຸຍາດໃຫ້ຕໍ່ອາຍຸສັນຍາ ເກີນກຳນົດຕາມທີ່ລະບຸໄວ້ໃນກົດໝາຍອີກ.

4. ມອບໃຫ້ຄະນະສະເພາະກິດ ທີ່ໄດ້ຮັບການແຕ່ງຕັ້ງ ຕາມຄຳສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ສົມທົບກັບອົງການປົກຄອງທ້ອງຖິ່ນທຸກຂັ້ນ ດຳເນີນການກວດກາ, ປະເມີນບັນດາໂຄງການລົງທຶນດ້ານແຮ່ທາດ ທີ່ທ້ອງຖິ່ນອະນຸຍາດ ເພື່ອລາຍງານໃຫ້ຂັ້ນເທິງຊາບ ແລະ ຂໍທິດຊີ້ນຳ ເປັນແຕ່ລະໄລຍະ ເພື່ອໃຫ້ໂຄງການເຫຼົ່ານັ້ນ ດຳເນີນການໂດຍສອດຄ່ອງຕາມກົດໝາຍກຳນົດ, ພ້ອມທັງປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ.

5. ການອອກອະນຸຍາດລົງທຶນດ້ານແຮ່ທາດ ຂອງອົງການປົກຄອງທ້ອງຖິ່ນທຸກຂັ້ນ ຕ້ອງໄດ້ມີຄຳເຫັນທາງດ້ານການ ແລະ ວິຊາການ ຈາກຂັ້ນສູນກາງ ແລະ ໃຫ້ປະຕິບັດຕາມຫຼັກການລວມສູນປະຕູດຽວເທົ່ານັ້ນ.

6. ສຳລັບງົບປະມານ ທີ່ຮັບໃຊ້ການເຄື່ອນໄຫວຂອງຄະນະສະເພາະກິດ ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ແມ່ນໃຫ້ນຳໃຊ້ງົບປະມານຂອງລັດ ແຕ່ລະຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ງົບປະມານບ້ວງຄຸ້ມຄອງໂຄງການ.

7. ມອບໃຫ້ຄະນະສະເພາະກິດ ທີ່ໄດ້ຮັບການແຕ່ງຕັ້ງ ຕາມຄຳສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ

2012 ສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ໂດຍໃຫ້ສືບຕໍ່ຖືເອົາຮູບແບບ ແລະ ກົນໄກ ທີ່ໄດ້ປະຕິບັດຜ່ານມາ. ໃນກໍລະນີຈຳເປັນ ຄະນະດັ່ງກ່າວ ສາມາດສະເໜີແຕ່ງຕັ້ງຄະນະ ແລະ ອອກບົດແນະນຳລະອຽດເພີ່ມເຕີມໄດ້ ໂດຍອີງໃສ່ເນື້ອໃນຈິດໃຈ ຂອງຄຳສັ່ງສະບັບນີ້.

8. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າ, ນະຄອນຫຼວງ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມືຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

9. ຄຳສັ່ງສະບັບນີ້ ປ່ຽນແທນຄຳສັ່ງເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຈົນກ່ວາຈະມີຄຳສັ່ງປ່ຽນແປງໃໝ່.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 09 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02 .07. 2018

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສະຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ

**ເຖິງ:** ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຄຳສັ່ງວ່າດ້ວຍການໂຈະການພິຈາລະນາໂຄງການໃໝ່ ສຳລັບການຂຸດຄົ້ນ ແລະ ສຳຫຼວດ, ການປູກຢາງພາລາ ແລະ ໄມ້ວິກ ໃນຂອບເຂດທົ່ວປະເທດ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມ ລັດຖະບານ ສະໄໝສາມັນ ປະຈຳເດືອນທັນວາ 2015 ສະບັບ ເລກທີ 12/ລບ, ລົງວັນທີ 05 ທັນວາ 2015;
- ອີງຕາມ ການຊີ້ນຳ ແລະ ຕົກລົງ ໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 04-05 ກໍລະກົດ 2017;

- ອີງຕາມ ໜັງສືສະເໜີ ສະບັບເລກທີ 0989/ກຜທ.ລທ5, ລົງວັນທີ 03 ພຶດສະພາ 2018 ຂອງກະຊວງ ແຜນການ ແລະ ການລົງທຶນ,

ຜ່ານການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012, ລັດຖະບານ ເຫັນໄດ້ວ່າການລົງທຶນຂອງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໄດ້ປະກອບສ່ວນສຳຄັນເຂົ້າໃນການພັດທະນາດ້ານຂະແໜງການກະສິກຳ ແລະ ປ່າໄມ້ ໄດ້ນຳຜົນປະໂຫຍດມາໃຫ້ແກ່ປະເທດຊາດ ກໍ່ຄືໄດ້ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ດີພໍສົມຄວນ ໃນໄລຍະຜ່ານມາ, ເຖິງຢ່າງໃດກໍຕາມ ຕ້ອງໄດ້ເພີ່ມທະວີໃນການຄຸ້ມຄອງການນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດອື່ນໆໃນຂອບເຂດທົ່ວປະເທດ ໃຫ້ມີຄວາມຮັດກຸມ ແລະ ມີປະສິດທິພາບສູງ, ຈຶ່ງເຫັນວ່າຍັງມີຄວາມຈຳເປັນ ຕ້ອງໄດ້ສືບຕໍ່ກວດກາປະເມີນຜົນ ແລະ ຈັດປະເພດໂຄງການ, ສ້າງຄວາມເຂັ້ມແຂງ ແລະ ຄວາມພ້ອມ ໃນການພັດທະນາ ລວມທັງການສ້າງນະໂຍບາຍ ແລະ ຍຸດທະສາດ ທີ່ຊັດເຈນຕາມວິໄສທັດການພັດທະນາແບບຍືນຍົງ ແລະ ເຕີບໂຕສີຂຽວ ຂອງລັດຖະບານ ໃນໄລຍະໃໝ່.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

**1. ໂຄງການປູກໄມ້ອຸດສາຫະກຳ**

1.1 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ ກວດກາຄືນ ການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 13/ນຍ ເພື່ອປັບປຸງແກ້ໄຂບັນຫາຄົງຄ້າງ ໃຫ້ມີຄວາມສອດຄ່ອງ ແລະ ແທດເໝາະ ກັບນະໂຍບາຍສົ່ງເສີມການລົງທຶນ ໃນໄລຍະໃໝ່.

1.2 ໃຫ້ກະຊວງກະສິກຳ ແລະ ປ່າໄມ້, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຢຸດຕິການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ສຳລັບໂຄງການລົງທຶນໃໝ່ ເພື່ອປູກໄມ້ຢາງພາລາ, ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ທີ່ດິນທີ່ເປັນກຳມະສິດຂອງຕົນເອງ ເພື່ອປູກໄມ້ຢາງພາລາ ແມ່ນໃຫ້ສືບຕໍ່ຊຸກຍູ້ສົ່ງເສີມ ຕາມຄວາມເໝາະສົມ ຂອງປະເພດການນຳໃຊ້ທີ່ດິນ ທີ່ຂະແໜງການກ່ຽວຂ້ອງໄດ້ກຳນົດ.

1.3 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ຊຸກຍູ້ ສົ່ງເສີມບັນດາໂຄງການປູກໄມ້ອຸດສາຫະກຳ ທີ່ເປັນເປົ້າໝາຍປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ໃນອານາຄົດເປັນຕົ້ນແມ່ນ: ໄມ້ວິກ, ໄມ້ກະຖິນນະລົງ, ໄມ້ກະຖິນເທພາ, ໄມ້ສັກ, ໄມ້ປ່ອງ ແລະ ໄມ້ພັນພື້ນເມືອງອື່ນໆ.

1.4 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບອົງການປົກຄອງທ້ອງຖິ່ນ ຊຸ້ນຂ້ຽວສຳຫຼວດ, ຈັດສັນວາງແຜນການນຳໃຊ້ທີ່ດິນ ໃນສາມປະເພດປ່າ ໃຫ້ສຳເລັດໂດຍໄວ, ໃນນີ້ໃຫ້ເລັ່ງໃສ່ທີ່ດິນປ່າໄມ້

ຊຸດໂຊມ ໃນເຂດປ່າຜະລິດ ເພື່ອຈັດສັນ ແລະ ສົ່ງເສີມການປູກໄມ້ເປັນສິນຄ້າ ແລະ ເປັນວັດຖຸດິບ ສະໜອງໃຫ້ແກ່ການປຸງແຕ່ງທົດແທນການນຳໃຊ້ໄມ້ ຈາກປ່າທຳມະຊາດ.

1.5 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ດຳເນີນການກວດກາ ແລະ ປະເມີນຜົນຄືນ ບັນດາໂຄງການລົງທຶນປູກໄມ້ອຸດສາຫະກຳ ທີ່ກວມເອົາເນື້ອທີ່ດິນ ຂອງ 3 ປະເພດປ່າ (ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ) ທີ່ສູນກາງ ແລະ ທ້ອງຖິ່ນ ອະນຸມັດຜ່ານມາ ເຫັນວ່າບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ລວມທັງການປະຕິບັດພັນທະຕ່າງໆ ຫາກພົບເຫັນມີການກະທຳຜິດ ຫຼື ລະເມີດ ແມ່ນໃຫ້ດຳເນີນມາດຕະການ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

1.6 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກວດກາ ແລະ ທົບທວນຄືນ ສັນຍາເຊົ່າ ຫຼື ສຳປະທານທີ່ດິນລັດ ເພື່ອປູກໄມ້ ທີ່ໄດ້ເຊັນສັນຍາແລ້ວ ລວມທັງການລົງທຶນ ຮູບແບບ 2+3 ຊຶ່ງເຫັນວ່າ ມີຊ່ອງຫວ່າງ, ບໍ່ຮັດກຸມ ແລະ ຜົນປະໂຫຍດບໍ່ສະເໝີພາບ ກໍຕ້ອງໄດ້ພິຈາລະນາ ແລະ ເຈລະຈາຄືນ ຕາມແຕ່ລະກໍລະນີ.

## 2. ໂຄງການປູກກ້ວຍ ແລະ ພືດກະສິກຳອື່ນ

2.1 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ມີມາດຕະການແກ້ໄຂຕໍ່ຜົນກະທົບການອະນຸຍາດ ໃຫ້ເຊົ່າ ຫຼື ສຳປະທານເນື້ອທີ່ດິນຜ່ານມາ ແລະ ສຳລັບໂຄງການ ລົງທຶນໃໝ່ ເພື່ອປູກກ້ວຍ ແລະ ພືດກະສິກຳອື່ນໆ ທີ່ນຳໃຊ້ສານເຄມີທີ່ຕ້ອງຫ້າມ ແລະ ເກີນມາດຕະຖານ ທີ່ກຳນົດ ຊຶ່ງສ້າງຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.

2.2 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ ຊຸກຍູ້ ບັນດາໂຄງການປູກພືດກະສິກຳ ທີ່ເປັນເສດຖະກິດ ສາມາດແກ້ໄຂສະບຽງອາຫານ, ເປັນສິນຄ້າ ແລະ ປະກອບສ່ວນໃນການແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ.

2.3 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ການລົງທຶນ ຂອງບັນດາບໍລິສັດລົງທຶນປູກກ້ວຍຫອມ ໃນຮູບແບບການເຊົ່າ ຫຼື ສຳປະທານດິນຂອງລັດ ແລະ ທີ່ດິນຂອງບຸກຄົນ, ພ້ອມດຽວກັນ ກໍ່ໃຫ້ຈັດລະບົບການປູກກ້ວຍຫອມ ແລະ ພືດອື່ນໆ ໃຫ້ໄດ້ຕາມມາດຕະ ຖານການຜະລິດກະສິກຳທີ່ດີ ແລະ ສອດຄ່ອງກັບນະໂຍບາຍກະສິກຳສະອາດ.

2.4 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສືບຕໍ່ດຳເນີນການກວດກາ, ປະເມີນຜົນຄືນ ບັນດາໂຄງການປູກກ້ວຍຢູ່ທ້ອງຖິ່ນທີ່ໄດ້ຈັດຕັ້ງປະຕິບັດໄປແລ້ວນັ້ນ ແມ່ນໃຫ້ມີມາດຕະການຟື້ນຟູປັບປຸງທີ່ດິນຄືນ, ສ່ວນໂຄງການທີ່ ກຳລັງຈັດຕັ້ງປະຕິບັດ ກໍ່ໃຫ້ມີແບບແຜນຟື້ນຟູປັບປຸງທີ່ດິນຄືນໃຫ້ລະອຽດ ຈະແຈ້ງ ພ້ອມດຽວກັນກໍ່ໃຫ້ກວດກາຄືນການປະຕິບັດພັນທະຕ່າງໆ ຕາມສັນຍາ ແລະ ລະບຽບກົດ

ໝາຍ ຢ່າງເຂັ້ມງວດ.

2.5 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ດຳເນີນການກວດກາ ແລະ ປະເມີນຜົນຄືນ ບັນດາໂຄງການລົງທຶນພັດທະນາກະສິກຳ ທີ່ກວມເອົາເນື້ອທີ່ດິນ ຂອງ 3 ປະເພດປ່າ (ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ) ທີ່ເຫັນວ່າບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ລວມທັງການປະຕິບັດພັນທະຕ່າງໆ ຫາກພົບເຫັນມີການກະທຳຜິດ ຫຼື ລະເມີດ ແມ່ນໃຫ້ດຳເນີນມາດຕະການ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

2.6 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສຳຫຼວດ ຈັດສັນເຂດທີ່ເໝາະສົມສະເພາະ ໃນການປູກ, ການລ້ຽງ ເພື່ອຮັບຮອງຕໍ່ການຂໍອະນຸຍາດລົງທຶນໃໝ່ ສຳລັບ ໂຄງການປູກພືດກະສິກຳຕ່າງໆ, ການປູກຫຍ້າລ້ຽງສັດ, ອ່າງເກັບນ້ຳ ແລະ ແຫຼ່ງນ້ຳ ສຳລັບລ້ຽງປາ ແລະ ສັດນ້ຳຕ່າງໆ.

2.7 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ກວດກາການນຳເຂົ້າ, ການຈຳໜ່າຍ ແລະ ການນຳໃຊ້ປັດໄຈການຜະລິດຕ່າງໆ ເປັນຕົ້ນແມ່ນຢາປາບສັດຕູພືດ, ແນວພັນ ແລະ ຝຸ່ນ ໂດຍໃຫ້ປະຕິບັດຕາມນິຕິກຳ ຂອງຂະແໜງການກ່ຽວຂ້ອງຢ່າງເຂັ້ມງວດ.

## 3. ການຈັດຕັ້ງປະຕິບັດ

3.1 ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອອກຄຳແນະນຳສະເພາະ ເພື່ອຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ, ພ້ອມທັງເປັນເຈົ້າການ ແຕ່ງຕັ້ງຄະນະກຳມະການສະເພາະກິດຂອງຕົນ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

3.2 ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄືນ ພ້ອມທັງກຳນົດນະໂຍບາຍ, ຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ໃຫ້ສອດຄ່ອງຕາມເງື່ອນໄຂທ່າແຮງຂອງທ້ອງຖິ່ນ ຮັບປະກັນການນຳໃຊ້ທີ່ດິນ ຕາມທິດສີຂຽວ ແລະ ຍືນຍົງ.

3.3 ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຜັນຂະຫຍາຍ ອອກເປັນນິຕິກຳສະເພາະ, ສຳລັບການເຊົ່າ ຫຼື ສຳປະທານທີ່ດິນ ເພື່ອການລົງທຶນພັດທະນາດ້ານກະສິກຳ ແລະ ປ່າໄມ້ ໂດຍຜ່ານກົນໄກການຄຸ້ມຄອງຂອງລັດ ໃນແຕ່ລະຂັ້ນ ແຕ່ສູນກາງຮອດທ້ອງຖິ່ນ, ໃຫ້ມີການແບ່ງຂັ້ນຄຸ້ມຄອງ, ອະນຸຍາດ ແລະ ຊຸກຍູ້ຕິດຕາມ, ກວດກາ ຢ່າງຈະແຈ້ງ.

3.4 ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ລາຍງານຜົນການຈັດຕັ້ງປະຕິບັດ ແຕ່ລະໄລຍະ ໃຫ້ກະຊວງແຜນການ ແລະ ການລົງທຶນ ໃນນາມຫົວໜ້າຄະນະສະເພາະກິດ ເພື່ອເປັນບ່ອນອີງ ສັງລວມລາຍ

ງານ ລັດຖະບານ.

3.5 ຄຳສັ່ງສະບັບນີ້ ປ່ຽນແທນຄຳສັ່ງ ເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຈົນກ່ວາຈະມີຄຳສັ່ງປ່ຽນແປງໃໝ່.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 19 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 31 ທັນວາ 2018

# ຄຳສັ່ງ

## ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສະຖິຕິ ລະບົບສາຍຂວາງ

ເຖິງ : ບັນດາທ່ານລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນ ຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ04/ສພຊ ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ເອກະສານສະເໜີ ສະບັບເລກທີ 2070/ກຜທ, ລົງວັນທີ 31 ຕຸລາ 2018 ຂອງກະຊວງ ແຜນການ ແລະ ການລົງທຶນ.

ໃນໄລຍະຜ່ານມາ ພາຍຫຼັງທີ່ລັດຖະບານ ໄດ້ຮັບຮອງເອົາແຜນຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແຕ່ປີ 2016-2025 ແລະ ວິໄສທັດຮອດ 2030 ແລະ ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017 ປະກາດໃຊ້ ສາມາດເຮັດໃຫ້ການປັບປຸງກົງຈັກການຈັດຕັ້ງຂອງສູນກາງລົງຮອດທ້ອງຖິ່ນ ລວມທັງສາຍຕັ້ງ ແລະ ສາຍຂວາງ ກົງຈັກໄດ້ຮັບການປັບປຸງໂດຍພື້ນຖານ. ສຳລັບກົງຈັກການຈັດຕັ້ງສາຍຕັ້ງ ແມ່ນໄດ້ສຳເລັດຂັ້ນສູນກາງ ແລະ ຂັ້ນແຂວງ, ສ່ວນການຈັດຕັ້ງສາຍຂວາງ ກໍໄດ້ມີການສ້າງຕັ້ງຂຶ້ນຢູ່ບາງກະຊວງ ເຖິງແນວໃດກໍຕາມກົງຈັກການຈັດຕັ້ງສະຖິຕິຂອງສາຍຕັ້ງ ຂັ້ນເມືອງ ແມ່ນບໍ່ທັນມີ ແລະ ກົງຈັກສາຍຂວາງ ກໍຍັງມີຫຼາຍກະຊວງ ທີ່ບໍ່ທັນມີ ແລະ ກະຊວງທີ່ມີແລ້ວ ກໍ່ຍັງບໍ່ເປັນເອກະພາບກັນ ເຮັດໃຫ້ການຈັດຕັ້ງວຽກງານສະຖິຕິ ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ.

ສະນັ້ນ, ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍ ວ່າດ້ວຍສະຖິຕິ (ສະບັບປັບປຸງ) ແລະ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ 2016-2025 ແລະ ວິໄສທັດຮອດ 2030 ໄດ້ຈັດຕັ້ງຜັນຂະຫຍາຍຢ່າງກ້ວາງຂວາງ, ເລິກເຊິ່ງ, ທົ່ວເຖິງ ແລະ ມີປະສິດທິຜົນນັ້ນ ຈຶ່ງເຫັນມີຄວາມຈໍາເປັນຕ້ອງໄດ້ປັບປຸງກົງຈັກການຈັດຕັ້ງສາຍຕັ້ງ ແລະ ສາຍຂວາງ ໃຫ້ມີຄວາມຄ່ອງຕົວ, ກະທັດຮັດ ກ້າວໄປສູ່ຄຸນນະພາບດີກ່ວາເກົ່າ ແລະ ສາມາດຕອບສະໜອງຕາມຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ກໍ່ຄືການພັດທະນາຂະແໜງການ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.

**ນາຍົກລັດຖະມົນຕີ ອອກຄໍາສັ່ງ:**

1. ມອບໃຫ້ລັດຖະມົນຕີບັນດາກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ອອກຂໍ້ຕົກລົງກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງວຽກງານສະຖິຕິປະຈໍາຂະແໜງການຂອງຕົນ ໂດຍສອດຄ່ອງກັບ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ປີ 2017 ພາກທີ V, ໝວດທີ 2 ມາດຕາ 51 ຫາ 54 ຂອງກົດໝາຍ ດັ່ງກ່າວ.
2. ສໍາລັບໂຄງປະກອບກົງຈັກການຈັດຕັ້ງສະຖິຕິສາຍຂວາງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ປີ 2017 ພາກທີ V, ໝວດທີ 2, ມາດຕາ 50 ແມ່ນໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ນໍາໃຊ້ກົງຈັກ ແລະ ບຸກຄະລາກອນ ທີ່ມີໃນປະຈຸບັນນີ້ກ່ອນ, ສ່ວນບ່ອນທີ່ບໍ່ທັນໄດ້ສ້າງຕັ້ງເປັນກົງຈັກ ກໍ່ໃຫ້ແຕ່ງຕັ້ງມີຜູ້ຮັບຜິດຊອບວຽກງານສະຖິຕິໄປກ່ອນ, ເມື່ອລັດຖະບານ ມີຄວາມພ້ອມດ້ານຕ່າງໆ ຈຶ່ງສ້າງຕັ້ງ ແລະ ປັບປຸງ ໃຫ້ເປັນລະບົບ.
3. ສໍາລັບການຈັດຕັ້ງປະຕິບັດວຽກງານສະຖິຕິ ຂອງການຈັດຕັ້ງສະຖິຕິລະບົບສາຍຂວາງ ແມ່ນໃຫ້ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດຮອດປີ 2030 ແລະ ບົດແນະນໍາການຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030 ຂອງກະຊວງແຜນການ ແລະ ການລົງທຶນ ຄືດັ່ງນີ້:
   - 3.1 ສ້າງແຜນດໍາເນີນງານຂອງຂະແໜງການຂອງຕົນ ໃຫ້ສາມາດຕອບສະໜອງຄວາມຕ້ອງການ ຂອງການວາງແຜນ ແລະ ການຕິດຕາມປະເມີນຜົນ ໃນແຕ່ລະໄລຍະ;
   - 3.2 ຄົ້ນຄ້ວາ, ສ້າງຕົວຊີ້ບອກຂອງຂະແໜງການຂອງຕົນ ໂດຍອີງໃສ່ບັນຊີດັດຊະນີໝາຍ ທີ່ໄດ້ກໍານົດໂດຍສູນສະຖິຕິແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ວິໄສທັດ ຮອດປີ 2030;
   - 3.3 ການດໍາເນີນການສ້າງສະຖິຕິ, ການລາຍງານ ແລະ ການເຜີຍແຜ່ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໃນ ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ປີ 2017 ພາກທີ III, ໝວດທີ 1 ຫາ 4,ມາດຕາ 15 ຫາ 30 ແລະ ພາກທີ IV, ມາດຕາ 40 ຫາ 43.

4. ກ່ຽວກັບການຄຸ້ມຄອງສະຖິຕິ, ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ ດັ່ງນີ້:
   4.1. ເອົາໃຈໃສ່ ຊຸກຍູ້, ຕິດຕາມ, ສະໜັບສະໜູນການຈັດຕັ້ງປະຕິບັດວຽກງານສະຖິຕິ ຂອງຂະແໜງການຕົນ, ໃຫ້ສົມດູ່ ລະຫວ່າງ ຄວາມຕ້ອງການ, ການສະໜອງຂໍ້ມູນສະຖິຕິທາງການ;
   4.2. ການຈັດຕັ້ງປະຕິບັດແຜນງານສະຖິຕິ ຕ້ອງຮັບປະກັນໃຫ້ສອດຄ່ອງກັບແຜນງານຂອງຂະແໜງການຕົນ;
   4.3. ອຳນວຍຄວາມສະດວກ ແລະ ພິຈາລະນາແຫຼ່ງຊັບພະຍາກອນ ທີ່ຈຳເປັນໃຫ້ແກ່ ການດຳເນີນວຽກງານສະຖິຕິ ຂອງຂະແໜງການຕົນ ແລະ ຂອງ ສປປ ລາວ;
   4.4. ເອົາໃຈໃສ່ຄຸ້ມຄອງກວດກາທາງດ້ານວິຊາການ ຂອງການຈັດຕັ້ງສະຖິຕິລະບົບສາຍຕັ້ງຂອງຕົນ ຢູ່ຂັ້ນທ້ອງຖິ່ນ ໂດຍປະສານສົມທົບກັບສູນສະຖິຕິແຫ່ງຊາດ ສ້າງກົນໄກ ແລະ ວິທີການ ໃນການກວດກາ ໃຫ້ລະອຽດ.
5. ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເພີ່ມທະວີ ແລະ ຍຶດໝັ້ນການຮ່ວມມືວຽກງານສະຖິຕິ ດັ່ງນີ້:
   5.1. ຍຶດໝັ້ນຫຼັກການຮ່ວມມືລວມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ປີ 2017 ພາກທີ I, ມາດຕາ 7;
   5.2. ເປັນເຈົ້າການສ້າງກົນໄກ ແລະ ເພີ່ມທະວີການຮ່ວມມືກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມພາລະບົດບາດ ເພື່ອສະໜັບສະໜູນທາງດ້ານເຕັກນິກວິຊາການສະຖິຕິ ແລະ ແຫຼ່ງທຶນເຂົ້າໃນການປະຕິບັດວຽກງານວິຊາສະເພາະ ໂດຍມີການປະສານສົມທົບລະຫ່ວາງການຈັດຕັ້ງສະຖິຕິສາຍຕັ້ງ ແລະ ສາຍຂວາງ ແຕ່ສູນກາງຮອດທ້ອງຖິ່ນ.
6. ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ສ້າງ ແລະ ກຳນົດກົນໄກການປະສານງານໃຫ້ລະອຽດ ແລະ ເປັນລະບົບ ເປັນຕົ້ນ:
   6.1. ສ້າງລະບົບ ແລະ ກົນໄກການປະສານງານ ລະຫ່ວາງການຈັດຕັ້ງສະຖິຕິຂອງຕົນ ໃຫ້ມີລະບົບທີ່ລະອຽດ, ແນ່ນອນ, ທັງໃຫ້ສອດຄ່ອງກັບວຽກງານຕິດຕາມ ແລະປະເມີນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍ່ຄືແຜນພັດທະນາຂະແໜງການ ໃນແຕ່ລະໄລຍະ ເພື່ອໃຫ້ວຽກງານສະຖິຕິ ຂະແໜງການ ມີພື້ນຖານທາງດ້ານລະບອບວິທີ ຕາມຫຼັກການວິທະຍາສາດສະຖິຕິ, ມີຄຸນນະພາບ ແລະ ມີຄວາມເປັນເອກະພາບທາງດ້ານຂໍ້ມູນສະຖິຕິທາງການ;
   6.2. ເພີ່ມທະວີການສ້າງຄວາມເຂັ້ມແຂງ ຂອງລະບົບສະຖິຕິຂະແໜງການ, ເພີ່ມຄວາມເປັນເອກະພາບທາງດ້ານວິຊາການສະຖິຕິ ແລະ ຫຼີກລ້ຽງການຊໍ້າຊ້ອນຂອງວຽກງານ ແລະ ຍຶດໝັ້ນໃນການປະຢັດມັດທະຍັດ.
7. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ຊີ້ນຳຄົ້ນຄ້ວາພິຈາລະນາແຜນງົບປະມານ ສຳລັບວຽກງານສະຖິຕິ ຂອງສາຍຂວາງໃຫ້ເໝາະສົມ ຕາມທີ່ກຳນົດໄວ້ ໃນມາດຕາ 70 ແລະ 71 ຂອງ ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017 ເພື່ອຮັບໃຊ້ເຂົ້າໃນ

ການເຄື່ອນໄຫວວຽກງານທາງລັດຖະການ, ການສ້າງແຜນງົບປະມານ ຕ້ອງສອດຄ່ອງກັບການສ້າງແຜນກິດຈະກຳ ແລະ ແຜນຄວາມຕ້ອງການບຸກຄະລາກອນເປັນແຜນງານອັນລະອຽດຂອງຂະແໜງການຕົນ.

8. ທ່ານລັດຖະມົນຕີບັນດາກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ, ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຄຳສັ່ງແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.
9. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ໃຫ້ລັດຖະບານຊາບ ເປັນປົກກະຕິ.
10. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 03 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 21 / 01 / 2020

## ຄຳສັ່ງ

## ວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ

ເຖິງ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 18 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ສະບັບເລກທີ 002/ຄລທ.ສ ລົງວັນທີ 20 ສິງຫາ 2018;
- ອີງຕາມ ມະຕິຕົກລົງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພະຈິກ 2019, ສະບັບເລກທີ 12/ລບ, ລົງວັນທີ 16 ທັນວາ 2019;
- ອີງຕາມ ການສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3143/ກຜທ.ລທ6, ລົງວັນທີ 31 ທັນວາ 2019.

ເພື່ອຜັນຂະຫຍາຍເນື້ອໃນ ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍກ່ຽວຂ້ອງ ໃຫ້ຖືກຈັດຕັ້ງປະຕິບັດຢ່າງວ່ອງໄວ ແລະ ຈະແຈ້ງ ໂດຍສະເພາະການປັບປຸງລະບົບການບໍລິການ ການລົງທຶນປະຕູດຽວ ແລະ ການດຳເນີນທຸລະກິດ ຢູ່ ສປປ ລາວ ໃຫ້ມີຄວາມວ່ອງໄວ , ໂປ່ງໃສ ແລະ ເປັນເອກະພາບ

ໃນການສົ່ງເສີມ, ຄຸ້ມຄອງການລົງທຶນ ແລະ ການອຳນວຍຄວາມສະດວກ ໃນການດຳເນີນທຸລະກິດທັງພາຍໃນ ແລະ ຕ່າງປະເທດ ໃນຂອບເຂດທົ່ວປະເທດ, ຍົກລະດັບຄວາມສັກສິດໃນການປະຕິບັດກົດໝາຍ, ເພີ່ມທະວີຄວາມອາດສາມາດໃນການແຂ່ງຂັນດຶງດູດການລົງທຶນ ແລະ ເພື່ອເຮັດໃຫ້ການລົງທຶນຂອງພາກເອກະຊົນສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

**ນາຍົກລັດຖະມົນຕີ ອອກຄຳສັ່ງ:**

ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ທີ່ມີຄວາມຮັບຜິດຊອບ ກ່ຽວກັບວຽກງານສົ່ງເສີມການລົງທຶນ, ການບໍລິການ ການລົງທຶນປະຕູດຽວຢູ່ແຕ່ລະຂະແໜງການ ແລະ ໜ່ວຍງານທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ຮີບຮ້ອນແກ້ໄຂບັນດາຂອດຂັ້ນ, ກຳນົດເວລາ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກ ແກ່ການອະນຸຍາດລົງທຶນ ແລະ ການດຳເນີນທຸລະກິດ ຢູ່ ສປປ ລາວ.

**1. ມອບໃຫ້ຂະແໜງແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:**

1.1 ປັບປຸງການບໍລິການ ການລົງທຶນປະຕູດຽວ ເປັນກົນໄກອຳນວຍຄວາມສະດວກໃຫ້ນັກລົງທຶນ ໂດຍການສະໜອງການບໍລິການຕ້ອນຮັບ, ສະໜອງຂໍ້ມູນການລົງທຶນ, ການບໍລິການອອກໃບອະນຸຍາດລົງທຶນ ຂອງກິດຈະການສຳປະທານ ແລະ ກິດຈະການຄວບຄຸມ, ໃບສົ່ງເສີມການລົງທຶນ ແລະ ການບໍລິການ ຫຼັງການອະນຸຍາດລົງທຶນ ເປັນຕົ້ນ: ການບໍລິການ VISA, ບັດພັກເຊົາ, ບັດແຮງງານໃຫ້ຜູ້ລົງທຶນ. ພ້ອມດຽວກັນ ກໍ່ໃຫ້ບໍລິການປະສານງານຕິດຕາມເອົາຄຳເຫັນຂອງຂະແໜງການ ໃນບັນຊີກິດຈະການສຳປະທານ ແລະ ກິດຈະການຄວບຄຸມ ແລະ ປະສານງານເພື່ອໃຫ້ໄດ້ໃບທະບຽນວິສາຫະກິດ, ໃບທະບຽນອາກອນ ແລະ ໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການ ເພື່ອມອບໃຫ້ນັກລົງທຶນ ແລະ ການບໍລິການອື່ນໆ ຢູ່ຈຸດດຽວ;

1.2 ພາຍຫຼັງໄດ້ຮັບເອກະສານຄຳຮ້ອງຂໍລົງທຶນແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານໄປຂໍຄຳເຫັນນຳຂະແໜງການກ່ຽວຂ້ອງ ພາຍໃນກຳນົດ 2 ວັນລັດຖະການ, ເມື່ອໄດ້ຮັບຄຳເຫັນຕອບຄືນຄົບຖ້ວນແລ້ວຕ້ອງນຳສະເໜີບັນຫາດັ່ງກ່າວ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາອະນຸມັດ ຫຼື ປະຕິເສດ;

1.3. ການຍື່ນຄຳຮ້ອງຂໍລົງທຶນໃນກິດຈະການສຳປະທານ ແລະ ກິດຈະການຄວບຄຸມ ແມ່ນໃຫ້ຍື່ນເອກະສານສະເໜີຂໍລົງທຶນ ຜ່ານຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຕັ້ງຢູ່ກົມສົ່ງເສີມການລົງທຶນ ແລະ ຂັ້ນແຂວງ, ນະຄອນຫຼວງວຽງຈັນ ຕັ້ງຢູ່ພະແນກແຜນການ ແລະ ການ

ລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ. ໂດຍບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນທ້ອງຖິ່ນ ຕ້ອງແນະນຳໃຫ້ຜູ້ລົງທຶນດຳເນີນການຍື່ນຄຳຮ້ອງໃຫ້ຖືກຕາມຂັ້ນຕອນ ເພື່ອເຮັດໃຫ້ການຄົ້ນຄ້ວາຢ່າງ ເປັນລະບົບ ແລະ ສອດຄ່ອງກັບກົດໝາຍ;

1.4 ສ້າງລະບົບເອເລັກໂຕຣນິກ ເພື່ອເຊື່ອມຕໍ່ຂໍ້ມູນ ກ່ຽວກັບທະບຽນວິສາຫະກິດ, ໃບອະນຸຍາດລົງທຶນ, ໃບທະບຽນອາກອນ ແລະ ອະນຸຍາດດຳເນີນທຸລະກິດ ລະຫວ່າງ ຂະແໜງແຜນການ ແລະ ການລົງທຶນ, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ ແລະ ຂະແໜງການ ກ່ຽວຂ້ອງໃຫ້ເປັນຖານຂໍ້ມູນດຽວ;

1.5 ເປັນເຈົ້າການສັງລວມບັນຊີຜະລິດຕະພັນສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ຈາກຂະແໜງການ ກ່ຽວຂ້ອງທີ່ສາມາດຜະລິດ ແລະ ສະໜອງໄດ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອ ເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນໃນການຂໍ ນະໂຍບາຍ ນຳເຂົ້າຂອງບັນດາໂຄງການລົງທຶນພາກເອກະຊົນໃຫ້ວ່ອງໄວ.

**2. ມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ປະຕິບັດ ດັ່ງນີ້:**

2.1 ອອກໃບທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໃນຂໍ້ 1.3 ຂອງຄຳສັ່ງສະບັບນີ້ ສຳລັບກິດຈະການ ຄວບຄຸມ. ສຳລັບກິດຈະການທີ່ບໍ່ນອນໃນບັນຊີຄວບຄຸມ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງຂອງ ລັດຖະມົນຕີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0023/ອຄ. ກຄທວ, ລົງວັນ ທີ 9 ມັງກອນ 2019;

2.2 ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການປັບປຸງການອອກໃບອະນຸຍາດ ດຳເນີນທຸລະກິດ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດໃຫ້ມີຄວາມ ວ່ອງໄວ;

2.3 ປັບປຸງການອອກໃບທະບຽນວິສາຫະກິດໃຫ້ວ່ອງໄວ ໂດຍໃຊ້ລະບົບເອເລັກໂຕຣນິກເຊື່ອມຕໍ່ຂໍ້ ມູນກັບຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການເງິນ.

**3. ມອບໃຫ້ຂະແໜງການເງິນ ປະຕິບັດ ດັ່ງນີ້:**

3.1 ໃຫ້ແກ້ໄຂການນຳເອົາແຜນນຳເຂົ້າປະຈຳປີ (Master List) ເຂົ້າລະບົບການແຈ້ງພາສີປະຕູດຽວ ແຫ່ງຊາດ National Single Window (NSW) ໂດຍໄວພາຍຫຼັງຂໍ້ຕົກລົງຈາກຂະແໜງ ແຜນການ ແລະ ການລົງທຶນ ຮັບຮອງແລ້ວ;

3.2 ປັບປຸງການອອກໃບທະບຽນອາກອນໃຫ້ວ່ອງໄວ ໂດຍໃຊ້ລະບົບເອເລັກໂຕຣນິກເຊື່ອມຕໍ່ຂໍ້ມູນ ກັບຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ;

3.3 ຈັດສັນງົບປະມານ ສະໜອງແກ່ການສ້າງລະບົບເອເລັກໂຕຣນິກ ເພື່ອເຊື່ອມຕໍ່ຂໍ້ມູນ ກ່ຽວກັບ

ທະບຽນວິສາຫະກິດ, ອະນຸຍາດລົງທຶນ ແລະ ອະນຸຍາດດໍາເນີນທຸລະກິດ ລະຫວ່າງ ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງອຸດສາຫະກໍາ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງໃຫ້ເປັນຖານຂໍ້ມູນດຽວ.

**4. ມອບໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ປະຕິບັດ ດັ່ງນີ້:**

4.1 ໃຫ້ຮີບຮ້ອນສ້າງຕັ້ງໜ່ວຍງານປະສານງານບໍລິການ ການລົງທຶນປະຕູດຽວ ປະຈໍາຂະແໜງການຂອງຕົນຂຶ້ນ ພາຍໃຕ້ການຊີ້ນໍາ ຂອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ພ້ອມດ້ວຍ ກົມວິຊາການ, ພະແນກການ ເພື່ອເຮັດໜ້າທີ່ປະສານງານພາຍໃນ ຂະແໜງການຂອງຕົນໃນການຄົ້ນຄ້ວາເອກະສານການລົງທຶນໃຫ້ວ່ອງໄວ ແລະ ສົ່ງຄໍາເຫັນຄືນໃນດ້ານຫຼັກການໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ຕໍ່ການສະເໜີສໍາຫຼວດ, ສຶກສາຄວາມເປັນໄປໄດ້ ຂອງກິດຈະການສໍາປະທານ ພາຍໃນກໍານົດເວລາ 30 ວັນລັດຖະການ ແລະ ສໍາລັບກິດຈະການໃນບັນຊີຄວບຄຸມ ແມ່ນໃຫ້ມີຄໍາເຫັນຕອບຄືນດ້ານຫຼັກການໃນການສະເໜີສ້າງຕັ້ງບໍລິສັດ ພາຍໃນກໍານົດ 8 ວັນ ລັດຖະການ, ສ່ວນການອອກອະນຸຍາດດໍາເນີນທຸລະກິດແມ່ນໃຫ້ປະຕິບັດຕາມກົດໝາຍຂອງຂະແໜງການກ່ຽວຂ້ອງພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນແລ້ວ. ການປະກອບຄໍາເຫັນຕອບຄືນດັ່ງກ່າວຖ້າຫາກກາຍກໍານົດເວລາ ແມ່ນໃຫ້ເປັນຄວາມຮັບຜິດຊອບຂອງຂະແໜງການ;

4.2 ໃຫ້ມີການກໍານົດລະບຽບ ແລະ ເວລາໃນການຄົ້ນຄ້ວາ ເພື່ອປະກອບຄໍາເຫັນພາຍຫຼັງໄດ້ຮັບເອກະສານຄໍາຮ້ອງຂໍລົງທຶນຈາກຫ້ອງການບໍລິການ ການລົງທຶນປະຕູດຽວແລ້ວ, ແຕ່ລະຂະແໜງການຕ້ອງນໍາສົ່ງເອກະສານໃຫ້ກົມວິຊາການ ຫຼື ພະແນກການ ເພື່ອຄົ້ນຄ້ວາພິຈາລະນາ ແລະ ມີຄໍາເຫັນຕອບຄືນໃຫ້ໜ່ວຍງານປະສານງານບໍລິການ ປະຕູດຽວພາຍໃນກໍານົດເວລາ 20 ວັນລັດຖະການ ສໍາລັບກິດຈະການສໍາປະທານ ແລະ 5 ວັນ ລັດຖະການ ສໍາລັບກິດຈະການຄວບຄຸມການປະກອບຄໍາເຫັນຄືນດັ່ງກ່າວ ຕ້ອງຖືກສັງລວມຜ່ານໜ່ວຍງານປະສານງານບໍລິການ ການລົງທຶນປະຕູດຽວ ແລ້ວມີຄໍາເຫັນຕອບເປັນລາຍລັກອັກສອນໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ໂດຍຜ່ານຫ້ອງການກະຊວງ, ຫ້ອງການອົງການລັດທຽບເທົ່າກະຊວງ ຫຼື ຫ້ອງວ່າການກະຊວງກ່ຽວຂ້ອງຢູ່ຂັ້ນສູນກາງ, ສ່ວນຂັ້ນທ້ອງຖິ່ນ ແມ່ນໃຫ້ຜ່ານຫົວໜ້າພະແນກການ ແລະ ເຈົ້າເມືອງທີ່ຖືກສະເໜີຂໍຄໍາເຫັນ.

ສໍາລັບກິດຈະການທະນາຄານທຸລະກິດ ຫຼື ກິດຈະການໃດທີ່ມີກໍານົດເວລາການຄົ້ນຄ້ວາ ແລະ ຕອບຄືນຄໍາເຫັນໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ເປັນກໍານົດເວລາສະເພາະ ແມ່ນໃຫ້ປະຕິບັດຕາມກົດໝາຍຂອງຂະແໜງການດັ່ງກ່າວ;

4.3 ໃຫ້ສ້າງບັນຊີຮຽກການລົງທຶນ ທີ່ປະກອບດ້ວຍຂໍ້ມູນພື້ນຖານສໍາຄັນເຊັ່ນ: ຊື່ໂຄງການ, ຈຸດປະສົງ

ໂຄງການ, ທີ່ຕັ້ງ, ມູນຄ່າການລົງທຶນ, ການປະເມີນຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເບື້ອງຕົ້ນ, ນະໂຍບາຍດ້ານພາສີ-ອາກອນ ແລະ ຕະຫຼາດຈຳໜ່າຍ ເພື່ອດຶງດູດການລົງທຶນ ແລະ ອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນໃນການສຶກສາເບື້ອງຕົ້ນ. ຊຶ່ງບັນຊີຮຽກການລົງທຶນ ດັ່ງກ່າວ ຕ້ອງສັງລວມເປັນໄລຍະ 6 ເດືອນ ແລະ 1 ປີ ແລ້ວສົ່ງມາລວມສູນຢູ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງສະໜອງໃຫ້ບັນດາສະຖານທູດ ແລະ ສະຖານກົງສູນຂອງ ສປປ ລາວ ທີ່ຢູ່ຕ່າງປະເທດ ເພື່ອນຳໃຊ້ເປັນຂໍ້ມູນໂຄສະນາດຶງດູດການລົງທຶນ;

4.4 ໃຫ້ສ້າງລາຍການເອກະສານທີ່ຕ້ອງການໃຫ້ນັກລົງທຶນປະກອບໃນເວລາຍື່ນຄຳຮ້ອງຂໍລົງທຶນໃນກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ແລ້ວສະໜອງໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ແລະ ທ້ອງຖິ່ນ ຫຼື ກຳນົດລາຍການເອກະສານດັ່ງກ່າວໄວ້ໃນເວບໄຊຂອງຂະແໜງການກ່ຽວຂ້ອງ ກັບເວບໄຊ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອເປັນຂໍ້ມູນແນະນຳນັກລົງທຶນໃນເວລາປະກອບຄຳຮ້ອງຂໍລົງທຶນ;

4.5 ໃຫ້ມີການປັບປຸງ ແລະ ທົບທວນບັນຊີກິດຈະການຄວບຄຸມຄືນໃໝ່ ຕາມດຳລັດຂອງ ທ່ານນາຍົກລັດຖະມົນຕີ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2013 ວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ໂດຍໃຫ້ຄັດເລືອກເອົາ ກິດຈະການທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເຂົ້າໃນບັນຊີຄວບຄຸມ ແລະ ໃຫ້ໃສ່ລະຫັດ LSIC ໃນແຕ່ລະກິດຈະການໃຫ້ຖືກຕ້ອງຊັດເຈນ. ໃຫ້ທຸກກະຊວງ, ອົງການລັດທຽບເທົ່າກະຊວງ ປັບປຸງໃຫ້ສຳເລັດແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ພາຍໃນ 90 ວັນ ເພື່ອ ລວບລວມສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ພິຈາລະນາຮັບຮອງ;

4.6 ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ກຳນົດແບ່ງຄວາມຮັບຜິດຊອບໃນການອະນຸຍາດດຳເນີນທຸລະກິດ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ລະອຽດຊັດເຈນ;

4.7 ໃຫ້ສັງລວມລາຍການກິດຈະການທີ່ຕ້ອງການອອກໃບອະນຸຍາດດຳເນີນທຸລະກິດທັງກິດຈະການໃນບັນຊີຄວບຄຸມ ແລະ ກິດຈະການນອກບັນຊີຄວບຄຸມໂດຍໃສ່ລະຫັດ LSIC ໃນແຕ່ລະກິດຈະການໃຫ້ຖືກຕ້ອງຊັດເຈນ. ພ້ອມນີ້ ກໍ່ໃຫ້ສັງລວມເອກະສານທີ່ຕິດພັນກັບການອອກອະນຸຍາດດຳເນີນທຸລະກິດຂອງຂະແໜງການກ່ຽວຂ້ອງ ສົ່ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນ 90 ວັນ;

4.8 ໃຫ້ແຕ່ລະກະຊວງ, ອົງການລັດທຽບເທົ່າກະຊວງ ສ້າງນິຕິກຳສະເພາະ ກ່ຽວກັບການອອກໃບ

ອະນຸຍາດດຳເນີນທຸລະກິດໃນຂະແໜງການຂອງຕົນ ໂດຍກຳນົດລະອຽດກ່ຽວກັບເງື່ອນໄຂ ແລະ ຂັ້ນຕອນ ການພິຈາລະນາ ເພື່ອໃຫ້ມີຄວາມວ່ອງໄວ ແລະ ຫຼຸດຜ່ອນການປະກອບເອກະສານຂອງ ນັກລົງທຶນ;

**5. ການຈັດຕັ້ງເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ, ແຂວງ ແລະ ນະຄອນຫຼວງວຽງຈັນ ປະຕິບັດ ດັ່ງນີ້:**

5.1 ໃຫ້ດຳເນີນການຈັດກອງປະຊຸມ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນຂອງຕົນຂຶ້ນຢ່າງເປັນປົກກະຕິ ຢ່າງໜ້ອຍ 2 ຄັ້ງ ຕໍ່ເດືອນ ເພື່ອຄົ້ນຄວ້າພິຈາລະນາບັນດາບັນຫາທີ່ກ່ຽວຂ້ອງ ໂດຍມອບໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ແລະ ຂັ້ນແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ສ້າງວາລະກອງປະຊຸມ ໂດຍກຳນົດມື້ປະຊຸມໃຫ້ຊັດເຈນ ຖ້າຮອດກຳນົດແລ້ວ ບໍ່ສາມາດເປີດກອງປະຊຸມໄດ້ໃຫ້ມີມາດຕະການອື່ນ ເປັນຕົ້ນ ເຮັດຈົດໝາຍວຽນເຖິງບັນດາທ່ານໃນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ວິທີການອື່ນໆ ເພື່ອບໍ່ໃຫ້ແກ່ຍາວເວລາ. ນອກນີ້ ໃນກໍລະນີຈຳເປັນຮີບດ່ວນ ກໍ່ສາມາດຈັດກອງປະຊຸມວິສາມັນໄດ້;

5.2 ການປະຕິບັດບົດບັນທຶກ ຂອງຄະນະກຳມະການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ (ຄລທ) ພາຍຫຼັງມີບົດບັນທຶກກອງປະຊຸມ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ, ນະຄອນຫຼວງວຽງຈັນແລ້ວ ໃຫ້ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງຮີບຮ້ອນລາຍງານຜົນການປຶກສາຫາລືໃນກອງປະຊຸມດັ່ງກ່າວ ຕໍ່ນາຍົກລັດຖະມົນຕີ ຫຼື ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຊາບ ຫຼື ມີການຊີ້ນຳເລີຍ ໂດຍບໍ່ໃຫ້ມີການຄົ້ນຄວ້າຄືນຜ່ານກົມກ່ຽວຂ້ອງ ໃນຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຫຼື ຂະແໜງກ່ຽວຂ້ອງ ໃນຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ ຕື່ມອີກ.

**6. ມາດຕະການຈັດຕັ້ງປະຕິບັດ.**

6.1 ຈັດຕັ້ງການໂຄສະນາເຜີຍແຜ່ໃຫ້ຂະແໜງການ, ທ້ອງຖິ່ນ ແລະ ນັກລົງທຶນ, ນັກທຸລະກິດ, ຜູ້ປະກອບການໃຫ້ມີຄວາມເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

6.2. ມອບໃຫ້ຂະແໜງແຜນການ ແລະ ການລົງທຶນ ເປັນເຈົ້າການຕິດຕາມ, ປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ແລະ ສະຫຼຸບລາຍງານລັດຖະບານ ຢ່າງເປັນປະຈຳ;

6.3 ມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຕິດຕາມ, ປະເມີນຄວາມຄືບໜ້າຂອງການປັບປຸງຂອດຂັ້ນ,ກຳນົດເວລາໃນການອອກໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການ ແລະ ສະຫຼຸບລາຍງານໃຫ້ລັດຖະບານ ຢ່າງເປັນປະຈຳ;

6.4 ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ໄດ້ພິມລົງຈົດໝາຍເຫດທາງລັດຖະການ 15 ວັນ ລັດຖະການ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ ເລກທີ 1522/ຜທ

ນະຄອນຫຼວງວຽງຈັນ,ວັນທີ 24 ກໍລະກົດ 2017

# ຂໍ້ຕົກລົງ
# ວ່າດ້ວຍ ຂໍ້ຫ້າມ ແລະ ວິໄນຂອງພະນັກງານ-ລັດຖະກອນ ຂອງຂະແໜງແຜນການ ແລະ ການລົງທຶນ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 374/ນຍ, ວັນທີ 22 ຕຸລາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ;
- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນສະບັບເລກທີ 74/ສພຊ, ວັນທີ 18 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ ເລກທີ 27/ສພຊ, ວັນທີ 18 ທັນ 2012;
- ອີງຕາມ ກົດໝາຍວ່າດ້ວຍການລົງທຶນລັດ ສະບັບເລກທີ 72/ສພຊ, ວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ວັນທີ 17 ພະຈິກ 2016.

**ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງ ດັ່ງນີ້:**

**ມາດຕາ 1 ຈຸດປະສົງ.**

1. ເພື່ອຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ຄວາມເປັນແບບຢ່າງ ຂອງພະນັກງານ-ລັດຖະກອນ, ສະກັດກັ້ນຕ້ານພະຍາດອາຍາສິດ ແລະ ປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນທີ່ຂະແໜງ ການ , ແນໃສ່ເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.
2. ເພື່ອຄຸ້ມຄອງ, ປ້ອງກັນພະນັກງານ-ລັດຖະກອນ ໃຫ້ມີລະບຽບວິໄນເຂັ້ມງວດ, ຮັກສາໄດ້ຈັນຍາບັນ-ຈັນຍາທຳ ແລະ ນໍ້າໃຈຮັກຊາດ, ຮັບໃຊ້ປະຊົນ. ຍົກສູງບົດບາດ ແລະ ຄວາມສາມາດຂອງພະນັກງານ-ລັດຖະກອນ ຂະແໜງແຜນການ ແລະ ການລົງທຶນ, ອີງການທີ່ຂຶ້ນກັບ.
3. ເພື່ອຮັບປະກັນໃຫ້ພະນັກງານ-ລັດຖະກອນ ແລະ ການຈັດຕັ້ງຂັ້ນຕ່າງໆ ຂອງຂະແໜງແຜນການແລະ

ການລົງທຶນ ມີຄວາມໂປ່ງໃສ, ໜັກແໜ້ນ, ເຂັ້ມແຂງ ແລະ ເຂັ້ມງວດ ໃນການປະຕິບັດກົດ ໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 2 ຂອບເຂດການນຳໃຊ້.**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະພະນັກງານ-ລັດຖະກອນ ຂອງຂະແໜງແຜນການ ແລະ ການລົງທຶນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ.

**ມາດຕາ 3 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ.**

1. ຫ້າມສວຍໃຊ້ໜ້າທີ່ໃນການປອມແປງ, ດັດແປງ, ເປີດເຜີຍຄວາມລັບຂອງເອກະສານ, ລາຍງານຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງ, ຊຸກເຊື່ອງ, ກັກ ແລະ ຖ່ວງດຶງເອກະສານຕ່າງໆ ເຊັ່ນ: ໃບອະນຸຍາດລົງທຶນ, ໃບທະບຽນສຳປະທານ, ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ, ມູນຄ່າໂຄງການລົງທຶນຂອງລັດ, ໃບຮັບຮອງຜົນການປະເມີນໂຄງການລົງທຶນຂອງລັດ, ເອກະສານໂຄງການຮ່ວມມືກັບຕ່າງປະເທດ, ຂໍ້ມູນສະຖິຕິທາງການການຈັດຊື້ຈັດຈ້າງ, ການປະມູນ ແລະ ເອກະສານທາງລັດຖະການອື່ນໆ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ, ຈຸ້ມເຈື້ອ, ເຊື້ອສາຍ, ພັກພວກ ຫຼື ໝູ່ຄະນະຂອງຕົນ ທີ່ເຮັດໃຫ້ການປະຕິບັດວຽກງານຊັກຊ້າ, ແກ່ຍາວເຊິ່ງເປັນສາຍ ເຫດເຮັດໃຫ້ມີຜົນດ້ານລົບ ແລະ ສູນເສຍຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.
2. ຫ້າມສ້າງກຸ່ມກ້ອນພັກພວກ, ປັ່ນປ່ວນ, ຫ້າມເວົ້າຈາສຽດສີ ແລະ ວິຈານຜູ້ອື່ນໃຫ້ເສຍຫາຍໂດຍບໍ່ມີມູນຄວາມຈິງ ແບ່ງແຍກຄວາມສາມັກຄີພາຍໃນ, ຫ້າມລຳອຽງ, ບໍ່ທ່ຽງທຳ, ບໍ່ນັບຖືການຈັດຕັ້ງ, ລ່ວງສິດອຳນາດ, ລະເມີດການຈັດຕັ້ງກົດໜ່ວງຖ່ວງດຶງ ຫຼື ບໍ່ປະຕິບັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ ຊຶ່ງກໍ່ໃຫ້ເກີດມີຄວາມເສຍຫາຍຕໍ່ການຈັດຕັ້ງ ຫຼື ບຸກຄົນອື່ນ.
3. ຫ້າມສົມຮູ້ຮ່ວມຄິດ, ປົກປ້ອງ, ເຊື່ອງອຳການກະທຳຜິດຂອງຜູ້ລະເມີດກົດໝາຍ ແລະ ນິຕິກຳ ກ່ຽວກັບວຽກງານການສົ່ງເສີມການລົງທຶນ, ການລົງທຶນຂອງລັດ, ການຄຸ້ມຄອງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ນິຕິກຳອື່ນໆ.
4. ຫ້າມເປັນນາຍໜ້າ, ເປັນທີ່ປຶກສາດ້ານການລົງທຶນ, ດ້ານກົດໝາຍ ແລະ ບໍລິການອື່ນໆ, ເປັນຫົວໜ້າບັນຊີໃຫ້ແກ່ການເຄື່ອນໄຫວທຸລະກິດ, ການດຳເນີນຄະດີ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ເພື່ອເຄື່ອນໄຫວໃນການຂໍອະນຸຍາດຕ່າງໆ ທີ່ນອນຢູ່ໃນພາລະບົດບາດຄວາມຮັບຜິດຊອບຂອງຕົນ ໂດຍບໍ່ຖືກມອບໝາຍ ຫຼື ແຕ່ງຕັ້ງຈາກຄະນະນຳ ກະຊວງ ຜທ ເຊັ່ນ: ວຽກງານການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ, ການລົງທຶນຂອງລັດ, ການຮ່ວມມືກັບຕ່າງປະເທດ ແລະ ອື່ນໆ.
5. ຫ້າມພະນັກງານ-ລັດຖະກອນ ຂະແໜງແຜນການ ແລະ ການລົງທຶນ ອະນຸຍາດ ຫຼື ຄົ້ນຄວ້າ ກ່ຽວກັບ ປະຕິບັດໂຄງການລົງທຶນນອກແຜນ, ໂຄງການລົງທຶນເກີນມູນຄ່າທີ່ສະພາແຫ່ງຊາດ ແລະ ສະພາທ້ອງຖິ່ນ ໄດ້ຮັບຮອງເອົາ, ໂຄງການລົງທຶນເກີນກຳນົດເວລາ ຕາມທີ່ໄດ້ກຳນົດໃນມາດຕາ 18

ຂອງກົດໝາຍລົງທຶນຂອງລັດ, ເອົາໂຄງການລົງທຶນຂອງລັດທີ່ບໍ່ຜ່ານການປະເມີນເຂົ້າແຜນ, ດຳເນີນການປະມູນ ທີ່ບໍ່ສອດຄອງກັບກົດໝາຍ ແລະ ບັນຈຸໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາທີ່ບໍ່ທັນໄດ້ມີການຢັ້ງຢືນແຫຼ່ງທຶນທີ່ແນ່ນອນເຂົ້າໃນແຜນ.

6. ຫ້າມໃຫ້ສິນບົນ, ຮັບສິນບົນ ຫຼື ຮຽກຮ້ອງເອົາສ່ວນແບ່ງເຊັ່ນ: ເງິນ, ວັດຖຸ ຫຼື ຮູບແບບ ອື່ນໆຈາກນັກທຸລະກິດ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນໆ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງຈຸ້ມເຈື້ອ, ພັກພວກ ຫຼື ໝູ່ຄະນະ.
7. ຫ້າມຍັກຍອກ, ສໍ້ໂກງ ເອົາຊັບສິນ, ເງິນຄຳຂອງລັດ, ລວມໝູ່, ຂອງປະຊາຊົນ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ, ລວມໝູ່ ຫຼື ປຸກລະດົມການອຸປະຖຳໃນຮູບແບບຕ່າງໆ ເພື່ອເອົາໄປເຮັດຂອງຂັວນຂອງຕ້ອນ ເພື່ອຮັບໃຊ້ຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ, ຈຸ້ມເຈືອ, ພັກພວກ.
8. ຫ້າມເລືອກວຽກ ຫຼື ປະຕິເສດຕໍ່ຂໍ້ຕົກລົງ ກ່ຽວກັບ ການມອບໝາຍໜ້າທີ່ ຫຼື ສັບຊ້ອນວຽກງານ.
9. ນອກຈາກບັນດາຂໍ້ຫ້າມທີ່ໄດ້ລະບຸໄວ້ຂ້າງເທິງນີ້ ຕ້ອງໄດ້ປະຕິບັດຕາມຂໍ້ຫ້າມທີ່ກຳນົດໄວ້ລະອຽດສະເພາະໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ແລະ ສອດຄ່ອງກັບຂະແໜງ ຜທ ແລະ ສອດຄ່ອງກັບຂະແໜງການອື່ນໆ.

- ນອກຈາກບັນດາຂໍ້ຫ້າມທີ່ໄດ້ລະບຸໄວ້ຂ້າງເທິງນີ້ແລ້ວ ຕ້ອງໄດ້ປະຕິບັດຕາມຂໍ້ຫ້າມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນໆ.

**ມາດຕາ 4 ນະໂຍບາຍຍ້ອງຍໍ.**

ພະນັກງານ-ລັດຖະກອນ ຂອງຂະແໜງແຜນການ ແລະ ການລົງທຶນ ທີ່ມີຜົນງານດີເດັ່ນເປັນແບບຢ່າງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍສັນລະເສີນຕາມນະໂຍບາຍລວມທີ່ພັກ-ລັດ ໄດ້ວາງອອກ.

**ມາດຕາ 5 ມາດຕະການຕໍ່ຜູ້ລະເມີດ.**

ພະນັກງານ-ລັດຖະກອນ ຂອງຂະແໜງແຜນການ ແລະ ການລົງທຶນ ຫາກມີພຶດຕິກຳທີ່ຂັດ ຫຼື ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງຈະຖືກປະຕິບັດມາດຕະການສຶກສາອົບຮົມ, ສຳຫຼວດກວດກາ, ປະຕິບັດວິໄນ ຫຼື ລົງໂທດຕາມກົດໝາຍ ແລະ ລະບຽບການຕ່າງໆ ຕາມແຕ່ລະກໍລະນີ ໜັກ ຫຼື ເບົາ.

**ມາດຕາ 6 ມາດຕະການສຶກສາອົບຮົມ.**

ຜ່ານການດຳເນີນການກວດກາ ຫາກພົບເຫັນການກະທຳຜິດສະຖານໜັກ ຫຼື ເບົາ ແລະ ເປັນຄັ້ງທຳອິດທີ່ບໍ່ສ້າງຄວາມເສຍຫາຍໃຫ້ແກ່ລັດ ຫຼື ສ້າງຄວາມເສຍຫາຍທີ່ມີມູນຄ່າເປັນເງິນບໍ່ເກີນ 5,000,000

ກີບ, ຜູ້ກະທຳຜິດມີຄວາມຈິງໃຈລາຍງານຮັບສາລະພາບ ຕໍ່ການກະທຳຜິດຂອງຕົນ ແລະ ສົ່ງເງິນຄືນຄົບຖ້ວນຕາມຈຳນວນ ແລະ ທັນຕາມກຳນົດເວລາ ຈະໄດ້ຮັບການສຶກສາອົບຮົມ ຫຼື ສຳຫຼວດກວດກາຕາມລະບຽບການ.

**ມາດຕາ 7. ມາດຕະການລົງວິໄນ.**

ພະນັກງານ-ລັດຖະກອນ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາ ຫຼື ມີການກະທຳຜິດ ທີ່ມີມູນຄ່າເປັນເງິນບໍ່ເກີນ 5,000,000 ກີບ, ແຕ່ບໍ່ຈິງໃຈລາຍງານ ບໍ່ຮັບສາລະພາບ ຕ້ອງຖືກລົງວິໄນ ຕາມກົດໝາຍ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 8 ມາດຕະການທາງອາຍາ ແລະ ທາງແພ່ງ.**

1. **ມາດຕະການທາງອາຍາ:** ພະນັກງານ-ລັດຖະກອນຜູ້ໃດ ໄດ້ລະເມີດຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ເປັນການກະທຳຜິດໃນສະຖານໜັກ ພາຍຫຼັງໄດ້ດຳເນີນການກວດກາ, ສືບສວນ-ສອບສວນ ເຫັນວ່າມີຂໍ້ມູນ, ຫຼັກຖານໜັກແໜ້ນ, ຮັດກຸມແລ້ວ ຕ້ອງຖືກດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການ.

2. **ມາດຕະການທາງແພ່ງ:** ພະນັກງານ-ລັດຖະກອນ ຜູ້ໃດທີ່ລະເມີດ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ນອກຈາກຈະໄດ້ຮັບໂທດທາງອາຍາແລ້ວ ຍັງຕ້ອງໄດ້ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ, ທັນຕາມກຳນົດເວລາ ແລະ ຊັບສິນທີ່ໄດ້ມາຈາກການກະທຳຜິດ ແລະ ຈະຖືກຢຶດເປັນຂອງລັດທັງໝົດຕາມທີ່ກົດໝາຍກຳນົດໄວ້.

**ມາດຕາ 9 ມາດຕະການຈັດຕັ້ງປະຕິບັດ.**

1. ຄະນະພັກ, ຄະນະນຳແຕ່ລະຂັ້ນ ຂອງຂະແໜງແຜນການ ແລະ ການລົງທຶນ ນັບແຕ່ສູນກາງຮອດທ້ອງຖິ່ນ ( ແຂວງ, ນະຄອນຫຼວງ ແລະ ເມືອງ ) ຕ້ອງເປັນເຈົ້າການເຜີຍແຜ່, ເຊື່ອມຊຶມຂໍ້ຕົກລົງສະບັບນີ້ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເລິກເຊິ່ງ ແລະ ທົ່ວເຖິງ ພ້ອມທັງຊີ້ນຳ-ນຳພາການຈັດຕັ້ງປະຕິບັດ ໂດຍຕິດພັນກັບການດຳເນີນຊີວິດການເມືອງ ປະຈຳເດືອນ ຂອງພັກ ແລະ ຂອງລັດ, ພາຍຫຼັງຄົ້ນຄວ້າເຊື່ອມຊຶມແລ້ວຕ້ອງໄດ້ເຊັນບົດບັນທຶກຮັບຮູ້ເພື່ອເປັນສັກຄີພິຍານ ແລະ ການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

2. ພະນັກງານ-ລັດຖະກອນ ຂະແໜງແຜນການ ແລະ ການລົງທຶນ ທຸກຄົນຕ້ອງເຄົາລົບ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ. ພາຍຫຼັງຄົ້ນຄວ້າເຊື່ອມຊຶມແລ້ວ ພະນັກງານ-ລັດຖະກອນທັງໝົດ ຕ້ອງໄດ້ລົງທະບຽນເຊັນລາຍຊື່ເຂົ້າໃນບົດບັນທຶກຮັບຮູ້ເພື່ອສຳເນົາ ແລະ ຮ່ວມມືໃນການຈັດຕັ້ງປະຕິບັດ.

3. ພະນັກງານ-ລັດຖະກອນ ຂະແໜງແຜນການ ແລະ ການລົງທຶນ ທຸກຄົນລວມທັງທະຫານ, ຕຳ

ຫຼວດ, ຜູ້ປະກອບການ ແລະ ປະຊາຊົນ ມີໜ້າທີ່ຕິດຕາມ, ກວດກາ ແລະ ລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

4. ມອບໃຫ້ກົມກວດກາ, ຄະນະກວດກາພັກ-ລັດ ແຕ່ລະຂັ້ນຕິດຕາມ, ກວດກາ ແລະ ດໍາເນີນທຸກມາດຕະການ ເພື່ອຊຸກຍູ້ ແລະ ແກ້ໄຂຜົນການກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ ແລະ ຂອບເຂດສິດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກ່ວາຈະມີການປ່ຽນແປງ.

ລັດຖະມົນຕີ

ປອ ຂຸ່ນ ແກ້ວມີໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ 3131/ກຜທ

ນະຄອນຫຼວງວຽງຈັນ ວັນທີ 12 ທັນວາ 2017

# ຂໍ້ຕົກລົງ
# ວ່າດ້ວຍການບໍລິຫານ ແລະ ຄຸ້ມຄອງເອກະສານພາຍໃນ
# ກະຊວງແຜນການ ແລະ ການລົງທຶນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງແຜນການ ແລະ ການລົງທຶນ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 239/ລບ, ລົງວັນທີ 13 ສິງຫາ 2015 ວ່າດ້ວຍເອກະສານທາງການ;
- ອີງຕາມ ການຄົ້ນຄວ້າ ນຳສະເໜີຂອງຫ້ອງການ ກະຊວງແຜນການ ແລະ ການລົງທຶນ ໂດຍຜ່ານການປຶກສາຫາລືກັບບັນດາກົມ ແລະ ທຽບເທົ່າກົມພາຍໃນ ກຜທ;

## ລັດຖະມົນຕີ ອອກຂໍ້ຕົກລົງ :

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການກ່ຽວກັບບໍລິຫານ ແລະ ຄຸ້ມຄອງເອກະສານພາຍໃນກະຊວງແຜນການ ແລະ ການລົງທຶນ (ກຜທ) ໃຫ້ເປັນລະບົບ ແລະ ມີຄວາມເປັນເອກະພາບ ແນ່ໃສ່ຮັບປະກັນບໍ່ໃຫ້ມີການຕົກເຮ່ຍເສຍຫາຍ, ຮັກສາໄດ້ຄວາມລັບຂອງເອກະສານ, ກວດສອບໄດ້ ແລະ ສອດຄ່ອງກັບລະບອບແບບແຜນວິທີເຮັດວຽກທີ່ມີຄວາມວ່ອງໄວ, ໂປ່ງໃສ, ທັນສະໄໝ, ມີວິໄນ ແລະ ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ.

**ມາດຕາ 2 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ກຜທ ໝາຍເຖິງ ກະຊວງແຜນການ ແລະ ການລົງທຶນ;

2. ຄະນະນຳ ກຜທ ໝາຍເຖິງ ທ່ານລັດຖະມົນຕີ ແລະ ບັນດາທ່ານຮອງລັດຖະມົນຕີ;

3. ຄະນະນຳ ຫ້ອງການ ກຜທ ໝາຍເຖິງ ຫົວໜ້າຫ້ອງການ ແລະ ບັນດາຮອງຫົວໜ້າຫ້ອງການ ກຜທ;

4. ຄະນະນຳກົມ ຫຼື ທຽບເທົ່າກົມ ໝາຍເຖິງ ຫົວໜ້າ-ຮອງຫົວໜ້າຫ້ອງການ, ຫົວໜ້າກົມ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າຫ້ອງການຮ່ວມມືລາວ-ຫວຽດນາມ, ຫົວໜ້າ-ຮອງຫົວໜ້າຫ້ອງການຮ່ວມມືລາວ-ຈີນ, ຫົວໜ້າ-ຮອງຫົວໜ້າຫ້ອງການສູນສະຖິຕິແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າຫ້ອງການສົ່ງເສີມ ແລະ ຄຸ້ມຄອງເສດຖະກິດພິເສດ, ຫົວໜ້າ-ຮອງຫົວໜ້າສູນຄົ້ນຄ້ວາວິໄຈນະໂຍບາຍການພັດທະນາ ແລະ ຫົວໜ້າຮອງຫົວໜ້າສູນຝຶກອົບຮົມເສດຖະກິດ-ແຜນການ;

5. ເອກະສານ ໝາຍເຖິງ ເຈັ້ຍ ຫຼື ສິ່ງພິມຕ່າງໆທີ່ຖືກສ້າງຂຶ້ນໂດຍການຂຽນ, ພິມ, ແຕ້ມ, ສຳເນົາຮູບຖ່າຍລວມເຖິງເອກະສານທີ່ສົ່ງຜ່ານທາງອີເມວ, ວັອດແອັບ ແລະ ທາງສື່ເອເລັກໂຕຼນິກອື່ນໆ ທີ່ມີຈຸດປະສົງນຳໃຊ້ເພື່ອແລກປ່ຽນຂໍ້ມູນຂ່າວສານ;

6. ເອກະສານທາງລັດຖະການ ໝາຍເຖິງເອກະສານທີ່ການຈັດຕັ້ງຂອງພັກ, ລັດ, ການຈັດຕັ້ງມະ ຫາຊົນ, ສັງຄົມ, ນິຕິບຸກຄົນ, ບຸກຄົນສ້າງຂຶ້ນ ແລະ ນຳໃຊ້ເຂົ້າໃນວຽກງານລັດຖະການ;

7. ເອກະສານຂາເຂົ້າ ໝາຍເຖິງເອກະສານທີ່ສົ່ງມາຈາກບຸກຄົນ, ນິຕິບຸກຄົນ ຫຼື ສຳນັກງານ-ອົງ ການຕ່າງໆ ເຖິງ ຜທ ທີ່ໄດ້ຈົ່ງກາຂາເຂົ້າ, ລົງທະບຽນ ແລະ ເຂົ້າເລກທີ່ ຂອງ ກຜທ;

8. ເອກະສານຂາອອກ ໝາຍເຖິງເອກະສານທີ່ສ້າງຂຶ້ນພາຍໃນ ກຜທ ແລ້ວສົ່ງອອກເຖິງບຸກຄົນ, ນິຕິບຸກຄົນສຳນັກງານ-ອົງການຕ່າງໆທີ່ມີເລກທີຂາອອກ (ລົງທະບຽນຂາອອກຂອງ ກຜທ) ຢູ່ຫ້ອງການ ກຜທ, ຫ້ອງການສູນສະຖິຕິແຫ່ງຊາດ, ຫ້ອງການບໍລິການລົງທຶນປະຕູດຽວ, ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ເອກະສານສະເພາະຂອງໜ່ວຍງານໃດໜຶ່ງຕາມຂອບເຂດສິດ ແລະ ພາລະບົດບາດຂອງຕົນ;

9. ເອກະສານພາຍໃນ ໝາຍເຖິງເອກະສານທີ່ສ້າງຂຶ້ນເພື່ອຮັບໃຊ້ວຽກງານພາຍໃນໂດຍຫ້ອງການ, ບັນດາກົມ, ທຽບເທົ່າສູນສະຖິຕິແຫ່ງຊາດທີ່ບໍ່ມີເປົ້າໝາຍສົ່ງອອກໄປນອກ ກຜທ ແລະ ເອກະສານທີ່ມີເປົ້າໝາຍສົ່ງອອກໄປນອກ ຜທ ແຕ່ບໍ່ທັນໄດ້ຮັບການລົງລາຍເຊັນຂອງການນຳ ກຜທ;

10. ເອກະສານສຳເນົາ ໝາຍເຖິງເອກະສານທີ່ຈັດເກັບໄວ້ໃນຮູບແບບຕ່າງໆເຊັ່ນ: ເຈ້ຍ, file, ຮູບພາບ, ວີດີໂອ, ແຜ່ນຊີດີ (CD- Rom)..ເພື່ອເປັນຂໍ້ມູນ, ຫຼັກຖານອ້າງອີງໃນໄລຍະສັ້ນ ແລະ ໄລຍະຍາວພາຍໃນ ກຜທ;

11. ລາຍເຊັນກຳກັບເອກະສານ ໝາຍເຖິງລາຍເຊັນຫຍໍ້ເພື່ອຢັ້ງຢືນວ່າເອກະສານດັ່ງກ່າວໄດ້ຜ່ານການກວດກາຄວາມຖືກຕ້ອງຕາມຂອບເຂດສິດ ແລະ ໜ້າທີ່ຂອງຜູ້ລົງລາຍເຊັນຫຍໍ້ໃສ່ເອກະສານ ດັ່ງ

ກ່າວ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບວຽກງານຄຸ້ມຄອງບໍລິຫານເອກະສານເປັນຕົ້ນ ການຈໍລະຈອນ, ການຕິດຕາມຄວາມຄືບໜ້າ ແລະ ຜົນສຳເລັດຂອງການຄົ້ນຄວ້າພິຈາລະນາ, ການສຳເນົາ, ການຄຸ້ມຄອງ ແລະ ການລາຍງານເອກະສານພາຍໃນ ກຜທ.

**ມາດຕາ 4 ຂອບເຂດສິດ ແລະ ໜ້າທີ່**

ຫ້ອງການ, ກົມ ແລະ ທຽບເທົ່າກົມພາຍໃນ ກຜທ ມີສິດ, ໜ້າທີ່ ແລະ ພັນທະ ໃນການຈັດຕັ້ງປະຕິບັດບໍລິຫານຄຸ້ມຄອງເອກະສານຢູ່ພາຍໃນກົມຂອງຕົນຕາມຂອບເຂດ,ພາລະບົດບາດຂອງຕົນ, ນອກນັ້ນ, ຫ້ອງການ ກຜທ ຍັງມີໜ້າທີ່ຄຸ້ມຄອງ ແລະ ບໍລິຫານເອກະສານລວມຂອງ ກຜທ ຢ່າງ ລວມສູນ.

## ໝວດທີ II

## ການດຳເນີນວຽກງານຄຸ້ມຄອງ ແລະ ການບໍລິຫານເອກະສານ

## ກ. ລະບົບ ແລະ ປະເພດຂອງເອກະສານ

**ມາດຕາ 5 ລະບົບເອກະສານເຂົ້າ-ອອກ**

5.1 ທຸກເອກະສານທີ່ສົ່ງເຂົ້າມາກະຊວງ ກຜທ ແມ່ນຕ້ອງໄດ້ຮັບການລົງທະບຽນເອກະສານຢູ່ຫ້ອງການກະຊວງ ໂດຍຜ່ານລະບົບຂາເຂົ້າ ກຜທ ຍົກເວັ້ນເອກະສານຂອງສູນສະຖິຕິແຫ່ງຊາດ, ຫ້ອງການບໍລິການລົງທຶນປະຕູດຽວ ແລະ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ.

5.2 ທຸກເອກະສານຂາອອກທີ່ບັນດາກົມ ຫຼື ທຽບເທົ່າກົມສ້າງຂຶ້ນ ທີ່ມີຈຸດປະສົງສົ່ງຫາພາຍນອກແມ່ນຕ້ອງເຊັນໂດຍຄະນະນຳ ກຜທ ຫຼື ຄະນະນຳຫ້ອງການ ກຜທ ຍົກເວັ້ນເອກະສານຂາອອກຂອງສູນສະຖິຕິແຫ່ງຊາດ, ຫ້ອງການບໍລິການລົງທຶນປະຕູດຽວ ແລະ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ.

**ມາດຕາ 6 ການລົງທະບຽນເອກະສານ**

ວິທີການລົງທະບຽນ ເອກະສານ ມີດັ່ງນີ້:

6.1 ການລົງທະບຽນເອກະສານຂາເຂົ້າ: ທຸກເອກະສານທີ່ສົ່ງເຂົ້າມາ ກຜທ ຕ້ອງໃຫ້ລົງທະບຽນເຂົ້າເລກທີ, ລົງວັນທີ/ເດືອນ/ປີ ໃສ່ບ່ອນທີ່ໄດ້ກຳນົດໄວ້ໃຫ້ຄົບຖ້ວນ, ຈະແຈ້ງ ແລະ ຊັດເຈນ;

6.2 ເອກະສານພາຍໃນຂອງບັນດາກົມກອງ ໃຫ້ລົງທະບຽນຢູ່ກົມກອງ ທີ່ເປັນຜູ້ຮ່າງເອກະສານ;

6.3 ທຸກເອກະສານທີ່ຫ້ອງການເຊັນກຳກັບໃສ່ໃບກົດສຳພັນແລ້ວຫ້ອງການຕ້ອງໄດ້ບັນທຶກໄວ້ໃນລະບົບໂປແກມຕິດຕາມເອກະສານຂອງຫ້ອງການ ກຜທ, ພ້ອມທັງຈັດສົ່ງໃຫ້ຄະນະນຳ ກຜທ ແລະ ບັນດາ

ກົມກ່ຽວຂ້ອງທັນທີ ຊຶ່ງມີການບັນທຶກການມອບ-ຮັບເອກະສານຢ່າງລະອຽດ;

6.4 ທຸກເອກະສານທີ່ມີຄໍາເຫັນຊີ້ນໍາຂອງຄະນະນໍາ ກຜທ ຫ້ອງການຕ້ອງສໍາເນົາໄວ້ 01 ສະບັບ ແລ້ວຈັດສົ່ງໃຫ້ກົມກອງທີ່ກ່ຽວຂ້ອງ ໂດຍມີການເຊັນມອບ-ຮັບ ແລະ ຕິດຕາມຄວາມຄືບໜ້າຂອງການຄົ້ນຄວ້າເອກະສານດັ່ງກ່າວເປັນລາຍເດືອນ ຫຼື ເວລາທີ່ກໍານົດໄວ້ ເພື່ອລາຍງານການນໍາ ກຜທ ໃຫ້ຊາບໃນອາທິດທີ 01 ຂອງເດືອນຕໍ່ໄປ;

6.5 ເອກະສານຂາອອກທຸກເອກະສານທີ່ເຊັນໂດຍ ຄະນະນໍາ ກຜທ, ຄະນະນໍາຫ້ອງການຕ້ອງໃຫ້ລົງທະບຽນຂາອອກຢູ່ ຫ້ອງການ ກຜທ ແລະ ສໍາເນົາໄວ້ 01 ສະບັບຢູ່ຫ້ອງການ ກຜທ;

6.6 ກໍລະນີເອກະສານທີ່ຈໍ້າກາລັບ, ລັບສະເພາະຕ້ອງສົ່ງໃຫ້ພາກສ່ວນກ່ຽວຂ້ອງ ຫຼື ບຸກຄົນທີ່ຖືກລະບຸຊື່ໂດຍກົງໂດຍບໍ່ໃຫ້ເປີດຊອງເອກະສານຍົກເວັ້ນໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ຫຼື ບຸກຄົນທີ່ຖືກລະບຸຊື່ຈຶ່ງສາມາດລົງທະບຽນເອກະສານດັ່ງກ່າວ.

**ມາດຕາ 7 ການຈໍ້າກາໃສ່ເອກະສານ.**

7.1 ເອກະສານທີ່ເຊັນໂດຍຄະນະນໍາ ກຜທ, ຄະນະນໍາຫ້ອງການຕ້ອງຈໍ້າກາຢູ່ ຫ້ອງການ ກຜທ ບ່ອນດຽວເທົ່ານັ້ນຍົກເວັ້ນເອກະສານວຽກພັກຂອງຄະນະພັກ ກຜທ ແມ່ນຈໍ້າກາຢູ່ຫ້ອງການພັກ ກົມຈັດຕັ້ງ ແລະ ພະນັກງານ. ຖ້າຕ້ອງການເອກະສານທີ່ຈໍ້າກາແດງຫຼາຍສະບັບຈະຕ້ອງສໍາເນົາ ແລະ ຈໍ້າກາເອກະສານໃຫ້ຄົບຕາມຈໍານວນທີ່ຕ້ອງການຢູ່ພາຍໃນຫ້ອງການເຊັ່ນກັນ;

7.2 ສໍາລັບເອກະສານທີ່ເຊັນໂດຍຄະນະນໍາກົມ ຫຼື ທຽບເທົ່າກົມພາຍໃນ ກຜທ ຕ້ອງຈໍ້າກາຢູ່ໃນກົມກອງທີ່ຮ່າງເອກະສານ;

7.3 ວິທີຈໍ້າກາໃສ່ເອກະສານທາງລັດຖະການ ແມ່ນໃຫ້ຈໍ້າກວມ 1/3 ຫຼື 1/4 ຂອງລາຍເຊັນມາທາງເບື້ອງຊ້າຍຂອງເອກະສານ ແລະ ບໍ່ໃຫ້ທັບຊື່ຕໍາແໜ່ງຫົວໜ້າສໍານັກງານ-ອົງການທີ່ລົງລາຍເຊັນໃນເອກະສານສະບັບດັ່ງກ່າວ.

**ມາດຕາ 8 ປະເພດຂອງເອກະສານ.**

ປະເພດຂອງເອກະສານ ມີດັ່ງນີ້ :

8.1 ເອກະສານ ນິຕິກໍາ ລວມມີ ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈໍາສະພາແຫ່ງຊາດ, ລັດຖະບັນຍັດ, ດໍາລັດຂອງລັດຖະບານ, ມະຕິຂອງລັດຖະບານ, ຄໍາສັ່ງຂອງລັດຖະບານ, ຂໍ້ຕົກລົງ ແລະ ຄໍາແນະນໍາຂອງນາຍົກລັດຖະມົນຕີ, ຂໍ້ຕົກລົງ, ບົດແນະນໍາ, ລະບຽບການພາຍໃນເຊັນໂດຍຄະນະນໍາ ກຜທ ແລະ ເອກະສານອື່ນໆທີ່ມີຄຸນລັກສະນະຄ້າຍຄືກັນ;

8.2 ເອກະສານ ບໍລິຫານ ລວມມີ ແຈ້ງການ, ໜັງສືທາງລັດຖະການ, ບົດລາຍງານ ແລະ ໜັງສືສະເໜີ, ຄໍາຮ້ອງລົງທຶນ, ໃບມອບສິດ, ສະໂໜດນໍາສົ່ງ, ຄໍາຮ້ອງທຸກ ແລະ ບັນດາເອກະສານທີ່ ກຜທ ສ້າງຂຶ້ນເພື່ອສົ່ງອອກນອກ ກຜທ ແລະ ຮັບໃຊ້ວຽກງານລວມ ເປັນຕົ້ນແມ່ນ: ບົດລາຍງານຂໍທິດຊີ້ນໍາຈາກຂັ້ນເທິງ

ເພື່ອຂໍອະນຸມັດເຊັນສັນຍາໂຄງການລົງທຶນພາກເອກະຊົນ, ແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ ແລະ 05 ປີ, ໜັງສືສະເໜີຂໍຮັບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ໜັງສືຢັ້ງຢືນຜົນການປະເມີນຍຸດທະສາດການພັດທະນາປະເທດ, ຍຸດທະສາດການພັດທະນາສະຖິຕິ ແລະ ເອກະສານອື່ນໆທີ່ມີລັກສະນະຄ້າຍຄືກັນ;

8.3 ເອກະສານ ວິຊາການ ລວມມີ ບົດຄົ້ນຄວ້າສັງລວມ, ບົດບັນທຶກທາງການ, ບົດປະກອບຄຳເຫັນ ໜັງສືເຊີນປະຊຸມ, ໜັງສືເຊີນທີ່ລະບຸຊື່ບຸກຄົນ ແລະ ເອກະສານອື່ນໆທີ່ມີລັກສະນະຄ້າຍຄືກັນ;

8.4 ເອກະສານວຽກພັກ ລວມມີ ເອກະສານຈາກຫ້ອງວ່າການສູນກາງພັກ, ເອກະສານທີ່ລົງນາມໂດຍຄະນະພັກ ກຜທ ຫຼື ຫ້ອງການພັກ ກຜທ ແລະ ເອກະສານອື່ນໆ ທີ່ມີລັກສະນະຄ້າຍຄືກັນ.

## ຂ. ຮູບແບບ ແລະ ຂັ້ນຕອນການຈໍລະຈອນເອກະສານ

### ມາດຕາ 9 ການຈໍລະຈອນເອກະສານຂາເຂົ້າ

9.1 ເອກະສານນິຕິກຳມີຂັ້ນຕອນການແຈກຢາຍຄື: 1)ຫົວໜ້າຫ້ອງການ ຫຼື ຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍພິຈາລະນາບ່ອນສົ່ງ ພ້ອມທັງສຳເນົາສົ່ງເຖິງບັນດາທ່ານຄະນະນຳ ກຜທ ເພື່ອຊາບທັນທີ ແລະ 2) ທ່ານ ຮອງລັດຖະມົນຕີຜູ້ຊີ້ນຳວຽກຫ້ອງການມີຄຳເຫັນເພື່ອແຈກຢາຍເອກະສານໃຫ້ກົມທີ່ກ່ຽວຂ້ອງຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດ.

- ໃນກໍລະນີທີ່ ທ່ານຮອງລັດຖະມົນຕີຜູ້ຊີ້ນຳວຽກຫ້ອງການບໍ່ໄດ້ປະຈຳການ ມອບໃຫ້ ທ່ານຫົວໜ້າຫ້ອງການປະຕິບັດໜ້າທີ່ການແຈກຢາຍເອກະສານນິຕິກຳໃຫ້ກົມກ່ຽວຂ້ອງຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.

- ຫ້ອງການສະຫຼຸບລາຍງານສະພາບການແຈກຢາຍເອກະສານໃຫ້ ຄະນະນຳ ກຜທ ຮັບຊາບໃນທຸກອາທິດ.

9.2 ເອກະສານບໍລິຫານມີຂັ້ນຕອນການແຈກຢາຍຄື: ຫົວໜ້າຫ້ອງການ ຫຼືຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍມີຄຳເຫັນເພື່ອແຈກຢາຍໃຫ້ກົມກ່ຽວຂ້ອງເພື່ອຄົ້ນຄ້ວາແລ້ວລາຍງານຄະນະນຳກະຊວງ.

9.3 ເອກະສານວິຊາການມີຂັ້ນຕອນການແຈກຢາຍຄື: ຫົວໜ້າຫ້ອງການ ຫຼື ຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍມີຄຳເຫັນເພື່ອແຈກຢາຍໃຫ້ກົມກ່ຽວຂ້ອງ ຫຼື ບຸກຄົນ ຕາມແຕ່ລະເປົ້າໝາຍຂອງເອກະສານເພື່ອພິຈາລະນາຈັດຕັ້ງປະຕິບັດ.

9.4 ເອກະສານວຽກພັກ, ວຽກພະນັກງານ ແລະ ວຽກນະໂຍບາຍ ຕ້ອງນຳສົ່ງໃຫ້ຫ້ອງການພັກ, ກົມຈັດຕັ້ງ ແລະ ພະນັກງານເພື່ອດຳເນີນຕໍ່ຕາມກົດລະບຽບສະເພາະ. ຖ້າມີກາຈ້ຳລັບສະເພາະທີ່ບໍ່ລະບຸລາຍຊື່ບຸກ ຄົນແມ່ນສົ່ງໃຫ້ ສະຫາຍເລຂາຄະນະບໍລິຫານງານພັກ ກຜທ ໂດຍກົງ ຫຼື ຜູ້ປະຈຳການວຽກພັກ ໂດຍບໍ່ໄດ້ຜ່ານລະບົບຂາເຂົ້າ ກຜທ.

9.5 ສຳລັບເອກະສານຂາເຂົ້າເຖິງທ່ານຮອງລັດຖະມົນຕີແຕ່ບໍ່ໄດ້ລະບຸຊື່ແມ່ນມີຂັ້ນຕອນການແຈກຢາຍເອກະສານຄື: ຫົວໜ້າຫ້ອງການ ຫຼື ຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍພິຈາລະນາບ່ອນສົ່ງເຖິງທ່ານຮອງລັດຖະມົນຕີ, ໂດຍອີງໃສ່ຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບລະຫວ່າງ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ພ້ອມທັງສຳເນົາສົ່ງທ່ານລັດຖະມົນຕີເພື່ອຊາບນຳ.

**ມາດຕາ 10 ການພິຈາລະນາລົງລາຍເຊັນ ແລະ ຈໍລະຈອນເອກະສານຂາອອກ**

10.1 ເອກະສານນິຕິກຳຂອງ ກຜທ ແມ່ນທ່ານລັດຖະມົນຕີ ຫຼື ທ່ານຮອງລັດຖະມົນຕີຜູ້ປະຈຳການເປັນຜູ້ລົງລາຍເຊັນ ແລະ ມີລະບົບການພິຈາລະນາ ແລະ ຈໍລະຈອນເອກະສານຄື: 1)ຄະນະພະແນກ ແລະຄະນະນຳກົມທີ່ສ້າງເອກະສານກວດກາຄວາມຖືກຕ້ອງທາງດ້ານເນື້ອໃນ ແລະ ຮູບແບບຂອງເອກະສານແລ້ວເຊັນກຳກັບເພື່ອຢັ້ງຢືນ; 2) ຫ້ອງການ ກວດກາຄວາມຖືກຕ້ອງດ້ານຮູບແບບ, ໄວຍາກອນ, ດ້ານເນື້ອໃນ ແລະ ຫຼັກການແລ້ວທ່ານຫົວໜ້າຫ້ອງການ ຫຼື ຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍ ເຊັນກຳກັບໃສ່ເອກະສານ; 3) ທ່ານຮອງລັດຖະມົນຕີຜູ້ຊີ້ນຳກົມກ່ຽວຂ້ອງມີຄຳເຫັນ; 4) ທ່ານລັດຖະມົນຕີພິຈາລະນາລົງລາຍເຊັນ.

- ກໍລະນີເອກະສານມີການປັບປຸງຕາມລາຍມືຂອງຄະນະນຳ ກຜທ ກົມກ່ຽວຂ້ອງຕ້ອງໄດ້ປັບປຸງຄືນໃຫ້ສຳເລັດຊ້າສຸດບໍ່ໃຫ້ເກີນ 01 ວັນ, ເຊັນກຳກັບ ແລ້ວນຳສະເໜີຂໍລາຍເຊັນຈາກຄະນະນຳໄດ້ເລີຍ;
- ກໍລະນີຄະນະນຳມີຄຳຖາມເຈາະຈີ້ມ ຫຼື ມີທິດຊີ້ນຳໃຫ້ປັບປຸງເພີ່ມເຕີມເຊິ່ງບໍ່ແມ່ນການປັບປຸງຕາມລາຍມື ແມ່ນພາຍຫຼັງກົມກ່ຽວຂ້ອງປັບປຸງແລ້ວ ຕ້ອງໄດ້ດຳເນີນຄືນເລີ່ມແຕ່ຂັ້ນຕອນທີ 01 ເປັນຕົ້ນໄປ.

10.2 ເອກະສານບໍລິຫານທີ່ຄະນະນຳ ກຜທ ເປັນຜູ້ລົງລາຍເຊັນ ແມ່ນໃຫ້ດຳເນີນຕາມຂັ້ນຕອນຂອງເອກະສານນິຕິກຳ, ສຳລັບເອກະສານບໍລິຫານທີ່ຫົວໜ້າຫ້ອງການ ຫຼື ຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍເປັນຜູ້ລົງລາຍເຊັ່ນ ມີລະບົບການພິຈາລະນາ ແລະ ຈໍລະຈອນເອກະສານຄື: 1)ຄະນະພະແນກ ແລະຄະນະນຳກົມທີ່ສ້າງເອກະສານກວດກາຄວາມຖືກຕ້ອງດ້ານເນື້ອໃນ, ຮູບແບບຂອງເອກະສານ ແລະເຊັນກຳກັບ ເພື່ອຢັ້ງຢືນ; 2) ຫ້ອງການກວດກາຄວາມຖືກຕ້ອງດ້ານຮູບແບບ, ໄວຍະກອນຂອງເອກະສານແລ້ວ ທ່ານຫົວໜ້າຫ້ອງການ ຫຼື ຮອງຫົວໜ້າຫ້ອງການຜູ້ທີ່ຖືກມອບໝາຍ ພິຈາລະນາລົງລາຍເຊັນ.

- ກໍລະນີເອກະສານຕ້ອງມີການປັບປຸງຕາມລາຍມືຂອງຄະນະຫ້ອງການ ກົມກ່ຽວຂ້ອງປັບປຸງຄືນໃຫ້ສຳເລັດແລ້ວເຊັນກຳກັບໂດຍຄະນະພະແນກ ຫຼື ຄະນະກົມແລ້ວ ນຳສະເໜີຂໍລາຍເຊັນຈາກຄະນະຫ້ອງການໄດ້ເລີຍ.
- ກໍລະນີຄະນະຫ້ອງການມີຄຳຖາມເຈາະຈີ້ມ ຫຼື ມີຄຳເຫັນໃຫ້ປັບປຸງເພີ່ມເຕີມ ເຊິ່ງບໍ່ແມ່ນການປັບປຸງຕາມລາຍມື ແມ່ນພາຍຫຼັງກົມກ່ຽວຂ້ອງປັບປຸງແລ້ວ ຕ້ອງໄດ້ດຳເນີນຄືນເລີ່ມແຕ່ຂັ້ນຕອນທີ 01 ເປັນຕົ້ນໄປ.

10.3 ເອກະສານວິຊາການທີ່ເຊັນໂດຍ ຄະນະຫ້ອງການ ແມ່ນໃຫ້ດຳເນີນຕາມຂັ້ນຕອນການພິຈາລະນາ ແລະ ຈໍລະຈອນຂອງເອກະສານບໍລິຫານ ສ່ວນເອກະສານທີ່ແຈກຢາຍພາຍໃນ ກຜທ ແລະ ເຊັນໂດຍກົມທີ່ຮ່າງເອກະສານ ແມ່ນໃຫ້ຜັນຂະຫຍາຍເອົາຫຼັກການລວມຂອງການພິຈາລະນາ ແລະ ຈໍລະຈອນເອກະສານທີ່ລະບຸໃນຂ້າງເທິງນັ້ນຕາມຄວາມເໝາະສົມ.

10.4 ໃນກໍລະນີທີ່ ຄະນະນຳ ກຜທ, ຄະນະຫ້ອງການ, ຄະນະກົມ ແລະ ທຽບເທົ່າ ມີພາລະກິດໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ, ຢູ່ທ້ອງຖິ່ນ ຫຼື ບໍ່ໄດ້ຢູ່ປະຈຳການເກີນ 01 ວັນ ແມ່ນຕ້ອງໄດ້ໂອນເອກະສານທີ່ຕົນເອງຍັງບໍ່ໄດ້ພິຈາລະນາໃຫ້ຜູ້ປະຈຳການເປັນຜູ້ຄົ້ນຄວ້າພິຈາລະນາແທນ ເພື່ອໃຫ້ຂະບວນການພິຈາລະນາເອກະສານມີລັກສະນະຕໍ່ເນື່ອງ.

10.5 ສຳລັບເອກະສານທີ່ບັນດາກົມ ແລະ ທຽບເທົ່າກົມ ນຳສົ່ງໃຫ້ຄະນະນຳ ກຜທ ພິຈາລະນາໂດຍກົງນັ້ນ, ຫຼັງຈາກໄດ້ຮັບທິດຊີ້ນຳຈາກຄະນະນຳ ກຜທ ແລ້ວຕ້ອງນຳເອກະສານດັ່ງກ່າວມາລົງທະບຽນຄືນຢູ່ຫ້ອງການ ກຜທ ຕາມຫຼັກການລວມເສຍກ່ອນ ແລ້ວຈຶ່ງນຳໄປຈັດຕັ້ງປະຕິບັດ.

10.6 ໃນເວລານຳສົ່ງເອກະສານເພື່ອຂໍລາຍເຊັນ ກົມກ່ຽວຂ້ອງຕ້ອງຄັດຕິດທຸກເອກະສານທີ່ກ່ຽວຂ້ອງໂດຍສະເພາະເອກະສານຊ້ອນທ້າຍ ແລະ ເອກະສານຄັດຕິດອື່ນໆ. ສຳລັບເອກະສານທີ່ມີຄວາມສຳຄັນນັ້ນຄະນະກົມທີ່ຮ່າງເອກະສານຕ້ອງເຊັນກຳກັບໃນເອກະສານຊ້ອນທ້າຍ ຫຼື ເອກະສານຄັດຕິດເພື່ອຮັບປະກັນທາງດ້ານເນື້ອໃນ.

**ມາດຕາ 11 ການສົ່ງເອກະສານເຖິງພາກສ່ວນພາຍນອກ ກຜທ**

ການຈັດສົ່ງເອກະສານເຖິງພາກສ່ວນພາຍນອກ ກຜທ ຕ້ອງປະຕິບັດ ດັ່ງນີ້ :

11.1 ເອກະສານທີ່ຫ້ອງການ ກຜທ ເປັນຜູ້ຈັດສົ່ງ ມີ:

- ບົດລາຍງານຫາລັດຖະບານ (ທີ່ເຊັນໂດຍຄະນະນຳ ກຜທ) ລວມທັງສະບັບສຳເນົາ;
- ຄຳສັ່ງ, ຂໍ້ຕົກລົງ, ບົດແນະນຳ, ບັດເຊີນ, ໜັງສືສະເໜີ, ສະໂໜດນຳສົ່ງ ແລະ ອື່ນໆ ທີ່ສົ່ງຫາບັນດາກະຊວງ, ອົງການທຽບເທົ່າ ແລະ ແຂວງ ໃນນັ້ນກົມກ່ຽວຂ້ອງເປັນຜູ້ຈັດໃສ່ຊອງແລ້ວໃຫ້ຫ້ອງການສົ່ງໃຫ້. ໃນກໍລະນີເອກະສານດ່ວນແມ່ນກົມກ່ຽວຂ້ອງເປັນຜູ້ນຳສົ່ງເພື່ອໃຫ້ທັນເວລາ.

11.2 ເອກະສານທີ່ຫ້ອງການພັກ ເປັນຜູ້ຈັດສົ່ງ ມີ:

- ເອກະສານລາຍງານກ່ຽວກັບວຽກພັກ-ພະນັກງານ, ເອກະສານສົ່ງຫາຫ້ອງວ່າການສູນກາງພັກ ແລະ ຄະນະຈັດຕັ້ງສູນກາງພັກ.

11.3 ເອກະສານບັນດາກົມ ຫຼື ທຽບເທົ່າກົມ ອ້ອມຂ້າງ ກຜທ ເປັນຜູ້ຈັດສົ່ງ ມີ:

- ເອກະສານດ່ວນທີເຊັນໂດຍຄະນະນຳ ກຜທ;
- ເອກະສານບໍລິຫານຂອງບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ກຜທ ທີ່ເຊັນໂດຍຄະນະນຳ

ຫ້ອງການ ກຜທ ມີຈຸດປະສົງນຳສົ່ງເຖິງພາກສ່ວນຕ່າງໆນອກ ກຜທ;

- ເອກະສານທີ່ເຊັນໂດຍຫົວໜ້າກົມ, ຮອງຫົວໜ້າກົມ ແລະ ທຽບເທົ່າ ທີ່ສົ່ງໃຫ້ແຕ່ລະພາກສ່ວນພາຍໃນ ກຜທ.

11.4 ເອກະສານກົມສົ່ງເສີມການລົງທຶນ ແລະ ຫ້ອງການສົ່ງເສີມຄຸ້ມຄອງເຂດເສດຖະກິດພິເສດເປັນຜູ້ຈັດສົ່ງ ມີ:

ເອກະສານທີ່ຕ້ອງໄດ້ເສຍຄ່າທຳນຽມ ເປັນຕົ້ນ ໃບທະບຽນສຳປະທານ, ໃບທະບຽນຫ້ອງການຜູ້ຕາງໜ້າ, ໃບອະນຸຍາດລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ 003/ປປທ ຂອງປະທານປະເທດ.

11.5 ການສົ່ງເອກະສານພາຍໃນນະຄອນຫຼວງວຽງຈັນໃຫ້ຈັດຕັ້ງປະຕິບັດພາຍໃນ 01 ວັນ ຫຼັງຈາກມື້ລົງລາຍເຊັນ ແລະ ສຳລັບຕ່າງແຂວງແມ່ນໃຫ້ຈັດສົ່ງໂດຍໄວຕາມຄວາມເໝາະສົມເຊິ່ງຕ້ອງບັນທຶກການມອບຮັບເອກະສານໂດຍມີລາຍເຊັນຜູ້ຮັບ ແລະວັນທີ່ຮັບຢ່າງຈະແຈ້ງ.

## ມາດຕາ 12 ການແຈກຢາຍເອກະສານພາຍໃນ

12.1 ຫ້ອງການ ກຜທ ເປັນຜູ້ແຈກຢາຍເອກະສານຂາເຂົ້າໄປຕາມແຕ່ລະເປົ້າໝາຍຂອງເອກະສານ.

12.2 ສຳຫຼັບເອກະສານທີ່ບັນດາກົມເປັນຜູ້ຮ່າງຂຶ້ນ ເພື່ອລາຍງານ/ຂໍທິດຊີ້ນຳ, ຂໍລາຍເຊັນ ຈາກຄະນະນຳ ກຜທ ຫຼື ຄະນະນຳຫ້ອງການ ກຜທ ຫ້ອງການ ແລະ ກົມກ່ຽວຂ້ອງຈະສົມທົບກັນໃນການຈໍລະຈອນເອກະສານເພື່ອໃຫ້ການແຈກຢາຍສາມາດປະຕິບັດໄດ້ໄວ ແລະ ມີຄວາມສະດວກ.

12.3 ເພື່ອອຳນວຍຄວາມສະດວກໃຫ້ແກ່ການແຈກຢາຍເອກະສານ ບັນດາກົມພາຍໃນ ກຜທ ແຕ່ງຕັ້ງຜູ້ຮັບ-ສົ່ງເອກະສານ ຢ່າງໜ້ອຍ 2 ທ່ານ ເພື່ອຮັບຜິດຊອບໃນການຮັບ-ສົ່ງເອກະສານ ນຳຫ້ອງການ ກຜທ.

12.4 ສຳລັບເອກະສານວິຊາການ ແລະ ບົດລາຍງານປະຈຳຂອງ ກະຊວງ, ອົງການ ແລະ ທ້ອງຖິ່ນ ຫ້ອງການສາມາດ ພິຈາລະນາສົ່ງໃນຮູບແບບອີເລັກໂຕຼນິກໄປຍັງກົມກ່ຽວຂ້ອງໂດຍຜ່ານ ອີເມວ (Email) ທາງການຂອງກົມ, ອີເມວຂອງບຸກຄົນຜູ້ຮັບຜິດຊອບປະສານງານວຽກງານເອກະສານຂອງກົມ ຫຼື ຊ່ອງທາງການສື່ສານທາງອີເລັກໂຕນິກອື່ນໆຕາມທິດປະຢັດ ແລະ ທັນເປັນທັນສະໄໝ.

12.5 ໃນການແຈກຢາຍເອກະສານພາກສ່ວນຮັບ-ສົ່ງເອກະສານ ຕ້ອງຮັບຜິດຊອບບໍ່ໃຫ້ເອກະສານຕົກເຮ່ຍເສຍຫາຍເປື້ອນເປິ ແລະ ບໍ່ໃຫ້ການຈັດສົ່ງມີການຊັກຊ້າ ແກ່ຍາວເວລາ.

**ມາດຕາ 13 ຮູບແບບເອກະສານທາງລັດຖະການ**

ຮູບແບບເອກະສານທາງລັດຖະການ ຕ້ອງປະກອບດ້ວຍ:

1. ເຄື່ອງໝາຍຊາດ;

2. ຊື່ປະເທດ, ຄຳຂວັນ;

3. ຊື່ການຈັດຕັ້ງປະກາດໃຊ້ເອກະສານ;

4. ເລກທີເອກະສານ;

5. ສະຖານທີ່, ວັນທີ ເດືອນ ປີ ອອກເອກະສານ;

6. ຊື່ ແລະ ເນື້ອໃນຫຍໍ້ເອກະສານ;

7. ບ່ອນອີງໃນການອອກເອກະສານ;

8. ເນື້ອໃນເອກະສານ;

9. ຕຳແໜ່ງ, ລາຍເຊັນ, ຊື່ ແລະ ນາມສະກຸນຜູ້ເຊັນເອກະສານ;

10. ປະທັບຕາ;

11. ປະທັບຕາດ່ວນ, ດ່ວນສະເພາະ ຫຼື ລັບ, ລັບສະເພາະຖ້າຈຳເປັນ;

12. ບ່ອນນຳສົ່ງ ຕາມແຕ່ລະກໍລະນີເອກະສານ;

ສຳລັບລາຍລະອຽດໃນການຈັດຮູບແບບເອກະສານທາງການແມ່ນໃຫ້ປະຕິບັດຕາມຄຳແນະນຳສະເພາະຂອງ ກະຊວງພາຍໃນ ແລະ ບົດແນະນຳອື່ນໆທີ່ກ່ຽວຂ້ອງ.

## ຄ. ການກວດກາ ແລະ ພິຈາລະນາເອກະສານ

**ມາດຕາ 14 ການຮຽບຮຽງ ແລະ ກວດກາ ຄວາມຖືກຕ້ອງຂອງເອກະສານກ່ອນຂໍລາຍເຊັນ**

14.1 ຫ້ອງການ, ບັນດາກົມ, ແລະ ທຽບເທົ່າກົມທີ່ຂຶ້ນກັບ ກຜທ ມີໜ້າທີ່ຮຽບຮຽງ, ກວດກາຄວາມຖືກຕ້ອງທາງດ້ານເນື້ອໃນ, ນິຕິກຳ, ຫຼັກໄວຍາກອນ, ດ້ານຮູບແບບ ແລະ ເປັນເຈົ້າການໃນການຕິດຕາມຄວາມຄືບໜ້າຂອງເອກະສານຂອງຕົນຕາມພາລະບົດບາດ ແລະຂອບເຂດຮັບຜິດຊອບຂອງຕົນ.

14.2 ຄະນະນຳກົມ ຫຼື ທຽບເທົ່າກົມ ຕ້ອງຮັບຜິດຊອບໃນການກວດກາຄວາມຖືກຕ້ອງຂອງເນື້ອໃນເອກະສານກ່ອນການເຊັນກຳກັບໃສ່ຮ່າງເອກະສານ ສ່ວນຫ້ອງການ ກຜທ ຮັບຜິດຊອບກວດກາຄວາມຖືກຕ້ອງທາງດ້ານຮູບແບບ, ຫຼັກໄວຍະກອນ ແລະ ຄວາມສອດຄ່ອງຂອງເອກະສານກ່ອນການລົງລາຍເຊັນຂອງ ຄະນະນຳ ກຜທ.

14.3 ຫ້ອງການ, ບັນດາກົມ ແລະ ທຽບເທົ່າກົມທີ່ຂຶ້ນກັບ ກຜທ ສົ່ງບັນຊີລາຍເຊັນກຳກັບ (ລາຍ

ເຊັນຫຍໍ້) ຂອງພະນັກງານຂັ້ນພະແນກຂຶ້ນໄປໃຫ້ຫ້ອງການ ກຜທ ເພື່ອສະດວກໃນການກວດກາຄວາມຖືກຕ້ອງຂອງເອກະສານ. ໃນເວລາມີການຊັບຊ້ອນ ຫຼື ປ່ຽນແປງທາງດ້ານບຸກຄະລາກອນທີ່ມີສິດໃນການເຊັນກຳກັບ ກົມກ່ຽວຂ້ອງເປັນເຈົ້າການໃນການສະເໜີປ່ຽນລາຍເຊັນກຳກັບ.

**ມາດຕາ 15 ການຄົ້ນຄວ້າ ແລະພິຈາລະນາເອກະສານ**

15.1 ການຄົ້ນຄວ້າ ແລະ ພິຈາລະນາເອກະສານໃນແຕ່ລະຂັ້ນຕ້ອງປະຕິບັດໃຫ້ທັນກັບເວລາ, ເອກະສານດ່ວນຕ້ອງໄດ້ຄົ້ນຄວ້າທັນທີພາຍຫຼັງໄດ້ຮັບເອກະສານ ແລະ ຕ້ອງສຳເລັດພາຍໃນກຳນົດເວລາທີ່ລະບຸໄວ້. ສຳລັບເອກະສານປົກກະຕິ ພາຍຫຼັງໄດ້ຮັບເອກະສານຕ້ອງໄດ້ຮັບການຄົ້ນຄ້ວາຕາມພາລະບົດບາດ ເພື່ອສະເໜີຂັ້ນເທິງພິຈາລະນາຕົກລົງໃຫ້ສຳເລັດ ຕາມກຳນົດເວລາທີ່ລະບຸໄວ້ໃນເອກະສານ.

15.2 ສຳລັບເອກະສານທີ່ຈະສະເໜີໃຫ້ຄະນະນຳ ກຜທ ພິຈາລະນາ ພາຍຫຼັງກົມກ່ຽວຂ້ອງໄດ້ຄົ້ນຄວ້າ ແລະ ມີຄຳເຫັນໃນນາມກົມຂອງຕົນແລ້ວໃຫ້ດຳເນີນຕາມຂັ້ນຕອນການຈໍລະຈອນເອກະສານ (ມາດຕາ 12) ໂດຍທັນທີ.

**ມາດຕາ 16 ການຈັດຕັ້ງປະຕິບັດທິດຊີ້ນຳຂອງຄະນະນຳກະຊວງ.**

16.1 ບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ກຜທ ຕ້ອງຈັດຕັ້ງປະຕິບັດທຸກຄຳເຫັນ ແລະ ທິດຊີ້ນຳຂອງຄະນະນຳກະຊວງ ໂດຍທັນທີ ເຊິ່ງຕ້ອງລາຍງານຄືນຄວາມຄືບໜ້າ ເປັນຕົ້ນແມ່ນ ຜົນສຳເລັດ ຫຼື ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດທິດຊີ້ນຳເປັນແຕ່ລະໄລຍະ ເພື່ອໃຫ້ຫ້ອງການ ກຜທ ສັງລວມລາຍງານຄະນະນຳ ກຜທ ກໍຄື ລັດຖະບານ ໃຫ້ທັນຕາມກຳນົດເວລາ;

16.2 ຫ້ອງການມີໜ້າທີ່ໃນການຊຸກຍູ້, ຕິດຕາມ, ທວງຖາມ ແລະ ສະຫຼຸບລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທິດຊີ້ນຳດັ່ງກ່າວ.

## ໝວດທີ III
## ການສຳເນົາເອກະສານ

**ມາດຕາ 17 ການສຳເນົາ ແລະເກັບຮັກສາເອກະສານ**

17.1 ການສຳເນົາເອກະສານລວມມີການທ້ອນໂຮມ, ໄຈ້ແຍກ, ກຳນົດຄຸນຄ່າ, ຂຶ້ນບັນຊີ ແລະປົກປັກຮັກສາເອກະສານທີ່ມີຄຸນຄ່າຂອງຂະແໜງແຜນການ ແລະການລົງທຶນ, ຫ້ອງການ ກຜທ ເປັນໃຈກາງໃນການຈັດຕັ້ງປະຕິບັດວຽກງານສຳເນົາເອກະສານໂດຍການປະສານສົມທົບກັບບັນດາກົມ ແລະ ທຽບເທົ່າກົມພາຍໃນ ກຜທ ໂດຍອີງໃສ່ຫຼັກການສຳເນົາເອກະສານຂອງ

ຂະແໜງການວິຊາສະເພາະ;

17.2 ຫ້ອງການ ກຜທ ມີໜ້າທີ່ສຳເນົາເອກະສານດັ່ງນີ້:

- ເອກະສານສະບັບເຄົ້າ (ສະບັບທີ່ມີລາຍເຊັນແທ້ບໍ່ແມ່ນສະບັບກັອບປີ້) ແລະ ສະບັບທີ່ມີກາແດງ ຍົກເວັ້ນຂໍ້ຕົກລົງທີ່ຕ້ອງໄດ້ເອົາໄປສະເໜີຖອນເງິນຈາກ ກະຊວງການເງິນ;

- ເອກະສານທາງການຂອງ ກຜທ ທີ່ມີຄຸນຄ່າໃນການໃຊ້ຍາວນານເປັນຕົ້ນແມ່ນ: ແຜນພັດທະນາເສດ ຖະກິດສັງຄົມໃນແຕ່ລະໄລຍະ, ຄຳສັ່ງ-ບົດແນະນຳຂອງລັດຖະມົນຕີ, ໃບຮັບຮອງຜົນການປະເມີນຜົນໂຄງການລົງທຶນຂອງລັດ, ໃບອະນຸຍາດລົງທຶນ, ໃບທະບຽນສຳປະທານ, ໃບທະບຽນຫ້ອງການຜູ້ ຕາງໜ້າ, ບົດລາຍງານຕ່າງໆ, ສັນຍາການລົງທຶນ, ປຶ້ມຂໍ້ມູນສະຖິຕິ, ເອກະສານຈ່າຍເງິນ ແລະ ເອກະສານອື່ນໆທີ່ມີການນຳໃຊ້ຍາວນານ ເຊິ່ງກົມກ່ຽວຂ້ອງເປັນເຈົ້າການໃນການໄຈ້ແຍກ, ທ້ອນໂຮມ ແລະ ມອບໃຫ້ ຫ້ອງການ ກຜທ ຢ່າງເປັນລະບົບປົກກະຕິ.

17.3 ບັນດາກົມ ຫຼື ທຽບເທົ່າກົມຕ້ອງສຳເນົາ ແລະ ເກັບຮັກສາເອກະສານເຂົ້າ-ອອກ ແລະ ເອກະສານພາຍໃນກົມກອງຂອງຕົນທີ່ໄດ້ຮ່າງຂຶ້ນໂດຍສະເພາະສຳນວນເອກະສານທີ່ມີຄວາມສຳຄັນ ແລະ ຈຳເປັນໃນການນຳໃຊ້ເຂົ້າໃນວຽກງານທາງການຂອງຕົນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ.

17.4 ສຳລັບເອກະສານທີ່ສຳເນົາຕ້ອງມີເນື້ອໃນຄົບຖ້ວນ, ສະອາດ ( ບໍ່ເປິເປື້ອນ ຫຼື ຂາດສ້ອຍ), ຕ້ອງຮ່າງເປັນສຳນວນເອກະສານ, ໄຈ້ແຍກເອກະສານ ພ້ອມຂຶ້ນທະບຽນເອກະສານຢ່າງລະອຽດ, ໂດຍມີສະຖານທີ່ປົກປັກຮັກສາເອກະສານທີ່ເໝາະສົມ ແລະ ມີລະບົບເກັບມ້ຽນເອກະສານເພື່ອຄວາມເປັນລະບຽບ ແລະ ສະດວກໃນການນຳໃຊ້;

17.5 ສຳລັບເອກະສານທີ່ມີຄວາມສຳຄັນຕ້ອງເພີ່ມການເກັບຮັກສາດ້ວຍລະບົບອີເລັກໂຕຼນິກ.

**ມາດຕາ 18 ອາຍຸການເກັບຮັກສາສຳນວນເອກະສານ ແລະ ການທຳລາຍເອກະສານ**

ບັນດາກົມ ແລະ ທຽບເທົ່າກົມພາຍໃນ ກຜທ ຕ້ອງເກັບຮັກສາສຳນວນເອກະສານແຕ່ລະປະເພດຕາມອາຍຸການໃຊ້ງານດັ່ງນີ້:

18.1 ສຳນວນເອກະສານທາງການທີ່ສຳເນົາໂດຍຫ້ອງການ ກຜທ ແລະ ກົມທີ່ກ່ຽວຂ້ອງ ໂດຍທົ່ວໄປຕ້ອງເກັບຮັກສາໄວ້ຢ່າງຕ່ຳບໍ່ໃຫ້ຫຼຸດ 15 ປີ ຫຼື ຕາມອາຍຸສະເພາະຂອງເອກະສານແຕ່ລະປະເພດ;

18.2 ສຳນວນເອກະສານທີ່ເປັນເລື່ອງລັບຕ້ອງປະຕິບັດຕາມລະບຽບກົດໝາຍ ຫຼື ຂໍ້ກຳນົດສະເພາະກ່ຽວກັບວຽກງານການເກັບຮັກສາເອກະສານແຫ່ງຊາດ;

18.3 ສຳນວນເອກະສານທີ່ສຳນັກງານ - ອົງການອື່ນສົ່ງໃຫ້ໃນເມື່ອແກ້ໄຂວຽກງານສຳເລັດແລ້ວ ຕ້ອງຮັກສາໄວ້ຢ່າງໜ້ອຍ 05 ປີ;

18.4 ສຳນວນເອກະສານປົກກະຕິອື່ນໆ ເມື່ອແກ້ໄຂວຽກງານແລ້ວຕ້ອງເກັບຮັກສາໄວ້ຢ່າງໜ້ອຍ 03 ປີ.

18.5 ການທຳລາຍເອກະສານທີ່ໝົດອາຍຸການນຳໃຊ້ ໃຫ້ປະຕິບັດຕາມລະບຽບສະເພາະຂອງກະຊວງກ່ຽວຂ້ອງ.

## ໝວດທີ IV

## ຂໍ້ຫ້າມ

### ມາດຕາ 19 ຂໍ້ຫ້າມກ່ຽວກັບວຽກງານເອກະສານທາງການ

19.1 ຫ້າມບັນດາກົມ ແລະ ທຽບເທົ່າກົມພາຍໃນ ກຜທ ເຊັນເອກະສານອອກໄປນອກ ກຜທ ເຖິງບັນດາຂະແໜງການ ແລະ ທ້ອງຖິ່ນ ຍົກເວັ້ນສູນສະຖິຕິແຫ່ງຊາດ, ຫ້ອງການບໍລິການລົງທຶນປະຕູດຽວ ແລະ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແຕ່ຕ້ອງສຳເນົາເອກະສານສຳຄັນທີ່ສົ່ງອອກໄປພາຍນອກ ໃຫ້ຫ້ອງການ ກຜທ ເພື່ອຕິດຕາມ ແລະ ລາຍງານຄະນະນຳ ກຜທ.

19.2 ຫ້າມເປີດເຜີຍເອກະສານປິດລັບ, ຄຳເຫັນຂອງຄະນະນຳຕໍ່ເອກະສານທີ່ມີຄວາມລະອຽດອ່ອນທາງດ້ານເນື້ອໃນເອກະສານທີ່ຍັງບໍ່ທັນໄດ້ຕົກລົງເປັນທາງການ ແລະ ເອກະສານອື່ນໆທີ່ບໍ່ອະນຸມັດໃຫ້ເປີດເຜີຍ;

## ໝວດທີ V

## ບົດບັນຍັດສຸດທ້າຍ

### ມາດຕາ 20 ການຈັດຕັ້ງປະຕິບັດ

20.1 ຄະນະນຳຫ້ອງການ, ຄະນະກົມ/ທຽບເທົ່າກົມພາຍໃນ ກຜທ ມີໜ້າທີ່ຮັບຜິດຊອບຊີ້ນຳ, ຈັດຕັ້ງເຜີຍແຜ່, ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານເອກະສານພາຍໃນກົມກອງຂອງຕົນ ຢ່າງທົ່ວເຖິງ ແລະ ມີປະສິດທິຜົນ.

20.2 ຫ້ອງການ ກຜທ ເປັນໃຈກາງໃນການພົວພັນ, ປະສານງານ, ຕິດຕາມຊຸກຍູ້ ແລະ ກວດກາບັນດາກົມ ແລະ ທຽບເທົ່າກົມອ້ອມຂ້າງ ກຜທ ໃນການຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ. ໃນໄລຍະການຈັດຕັ້ງປະຕິບັດຕົວຈິງ, ຖ້າຫາກມີບັນຫາໃດທີ່

ຍັງບໍ່ຈະແຈ້ງ ຫຼື ພົບຂໍ້ຫຍຸ້ງຍາກໃນການປະຕິບັດຫ້ອງການ ກຜທ ຕ້ອງສັງລວມບັນຫາແລ້ວ ລາຍງານຄະນະນຳກະຊວງ ເພື່ອມີທິດຊີ້ນຳໃນການປຸງແກ້ໄຂ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ ສຸພັນ ແກ້ວມີໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ 1815 /ກຜທ

ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2018

# ຂໍ້ຕົກລົງ
# ວ່າດ້ວຍ ການສ້າງຕັ້ງ ແລະ ການຄຸ້ມຄອງຫ້ອງການຜູ້ຕາງໜ້າ ຂອງນິຕິບຸກຄົນຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມສົ່ງເສີມການລົງທຶນ, ບົນພື້ນຖານການຄົ້ນຄວ້າເຫັນດີຂອງບັນດາກົມ, ທຽບເທົ່າກົມພາຍໃນ ກະຊວງແຜນການ ແລະ ການລົງທຶນ.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1.
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການໃນການເຄື່ອນໄຫວ, ການສ້າງຕັ້ງ ແລະ ການຄຸ້ມຄອງຫ້ອງການຜູ້ຕາງໜ້າ ຂອງນິຕິບຸກຄົນຕ່າງປະເທດ ຢູ່ ສປປ ລາວ ໃຫ້ເຄື່ອນໄຫວຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ຮັບປະກັນສ້າງເງື່ອນໄຂການດຶງດູດ ແລະ ສົ່ງເສີມການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ ຕາມນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະໃຫ້ນັບມື້ຫຼາຍຂຶ້ນ, ແນ່ໃສ່ຊຸກຍູ້ສົ່ງເສີມ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນຕ່າງປະເທດ.

**ມາດຕາ 2 ຫ້ອງການຜູ້ຕາງໜ້າ ຂອງນິຕິບຸກຄົນຕ່າງປະເທດ**

ຫ້ອງການຜູ້ຕາງໜ້າ ແມ່ນຫ້ອງການປະສານງານ ຕາງໜ້າໃຫ້ບໍລິສັດແມ່ຢູ່ຕ່າງປະເທດ ໃນການດໍາເນີນການສຶກສາຊ່ອງທາງການລົງທຶນ, ສຶກສາຂໍ້ມູນດ້ານການຄ້າ, ການບໍລິການ, ໃຫ້ຄໍາປຶກສາ ແລະ ປະສານງານ ໃຫ້ກຸ່ມບໍລິສັດເຄືອຄ່າຍ ຫຼື ສາຂາ, ພົວພັນກັບພາກສ່ວນຕ່າງໆ ທັງພາກລັດ ແລະ ເອກະຊົນ ຢູ່ ສປປ ລາວ ເພື່ອກະກຽມການສ້າງຕັ້ງ ແລະ ພັດທະນາທຸລະກິດການລົງທຶນ ຢູ່ ສປປ ລາວ, ຕິດຕາມການຈັດຕັ້ງປະຕິບັດ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ຢູ່ຕ່າງປະເທດ ໄດ້ເຊັນກັບລັດຖະບານ ໃນໂຄງການສໍາປະທານເທົ່ານັ້ນ, ສ່ວນສັນຍາປະເພດອື່ນ ແມ່ນບໍ່ຖືເປັນເງື່ອນໄຂໃນການສ້າງຕັ້ງຫ້ອງການຜູ້ຕາງໜ້າ.

**ມາດຕາ 3 ການອະທິບາຍຄໍາສັບ**

- **ນິຕິບຸກຄົນຕ່າງປະເທດ** ໝາຍເຖິງ ບໍລິສັດທີ່ຕັ້ງຢູ່ຕ່າງປະເທດ ໃນຮູບແບບ ບໍລິສັດຈໍາກັດ, ບໍລິສັດຈໍາກັດຜູ້ດຽວ, ລັດວິສາຫະກິດ ຫຼື ບໍລິສັດມະຫາຊົນ.

- **ສັນຍາ ກັບ ລັດຖະບານ ສປປ ລາວ** ໝາຍເຖິງ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ຢູ່ຕ່າງປະເທດ ໄດ້ເຊັນກັບລັດຖະບານ ສປປ ລາວ ໃນຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນ ໃນບັນຊີກິດຈະການສໍາປະທານ ທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

- **ການຕໍ່ອາຍຸເປັນງວດ** ໝາຍເຖິງ ການພິຈາລະນາຮັບຮອງການຕໍ່ອາຍຸເປັນງວດ, ງວດໜຶ່ງບໍ່ເກີນ 3 ປີ ໂດຍໃບອະນຸຍາດຫ້ອງການຜູ້ຕາງໜ້າ ຈະຖືກຕໍ່ອາຍຸໃຫ້ເປັນແຕ່ລະປີ ຈົນກວ່າຈະຄົບ 3 ປີ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ນິຕິບຸກຄົນຕ່າງປະເທດ ທີ່ສົນໃຈມາດໍາເນີນທຸລະກິດ ຢູ່ ສປປ ລາວ ແລະ ບັນດາຫ້ອງການຜູ້ຕາງໜ້າ ຂອງນິຕິບຸກຄົນຕ່າງປະເທດ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ການອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ

**ມາດຕາ 5 ປະເພດຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ ປະກອບມີ 2 ປະເພດ ດັ່ງນີ້:

- **ປະເພດທີ 1**: ຫ້ອງການຜູ້ຕາງໜ້າ ທີ່ເຮັດໜ້າທີ່ສຶກສາຂໍ້ມູນດ້ານການຄ້າ, ການລົງທຶນ, ການບໍລິການ, ປະສານງານກັບພາກລັດ ແລະ ພາກເອກະຊົນ ຢູ່ ສປປ ລາວ ເພື່ອສະໜອງຂໍ້ມູນໃຫ້ແກ່ບໍລິສັດແມ່ຢູ່ຕ່າງປະເທດ ໃນການຕັດສິນໃຈລົງທຶນ ຢູ່ ສປປ ລາວ ໂດຍເຮັດໜ້າທີ່ໃຫ້ຄໍາປຶກສາ ແລະ ເປັນຜູ້ປະສານງານ ໃຫ້ກຸ່ມບໍລິສັດເຄືອຄາຍ ຫຼື ສາຂາ ເພື່ອກະກຽມໃນການສ້າງຕັ້ງ ແລະ ພັດທະນາທຸລະກິດການລົງທຶນ ຢູ່ ສປປ ລາວ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**- ປະເພດທີ່ 2**: ຫ້ອງການຜູ້ຕາງໜ້າ ທີ່ເຄື່ອນໄຫວຕາງໜ້າໃຫ້ບໍລິສັດແມ່ ໃນການຕິດຕາມການຈັດຕັ້ງປະຕິບັດ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ຢູ່ຕ່າງປະເທດ ໄດ້ເຊັນກັບລັດຖະບານ ໃນໂຄງການສຳປະທານ ເພື່ອເຮັດໜ້າທີ່ປະສານງານກັບຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ແລະ ເອກະຊົນ. ຫ້ອງການຜູ້ຕາງໜ້າປະເພດນີ້ ຕ້ອງເຄື່ອນໄຫວຕາມຂອບເຂດ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ຢູ່ຕ່າງປະເທດ ໄດ້ເຊັນກັບລັດຖະບານເທົ່ານັ້ນ.

ຫ້ອງການຜູ້ຕາງໜ້າທຸກປະເທດ ບໍ່ມີສິດເຄື່ອນໄຫວດຳເນີນທຸລະກິດ ເພື່ອສ້າງລາຍຮັບ ຫຼື ຜົນກຳໄລ.

### ມາດຕາ 6 ການສະເໜີຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງຕົນ ຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຢູ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ຕາມແບບຟອມທີ່ກຳນົດໄວ້.

### ມາດຕາ 7 ການປະກອບເອກະສານ ຄຳຮ້ອງຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ

ຄຳຮ້ອງຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຕ້ອງປະກອບມີບັນດາເອກະສານ ດັ່ງນີ້:

1. ໃບສະເໜີຂໍ້ສ້າງຕັ້ງຫ້ອງການຜູ້ຕາງໜ້າ;
2. ກົດລະບຽບຂອງຫ້ອງການຜູ້ຕາງໜ້າ ທີ່ສະເໜີຂໍ້ສ້າງຕັ້ງ;
3. ໃບສະເໜີ ຫຼື ຂໍ້ຕົກລົງ ຂອງບໍລິສັດແມ່ ໃນການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ;
4. ໃບແຕ່ງຕັ້ງຜູ້ຕາງໜ້າຈາກບໍລິສັດແມ່, ພ້ອມດ້ວຍ ສຳເນົາໜັງສືຜ່ານແດນ ແລະ ຊີວະປະຫວັດຫຍໍ້ ຂອງຜູ້ທີ່ຖືກແຕ່ງຕັ້ງ;
5. ສຳເນົາເອກະສານຢັ້ງຢືນຖານະນິຕິບຸກຄົນ;
6. ປະຫວັດການເຄື່ອນໄຫວທຸລະກິດ ແລະ ເອກະສານຢັ້ງຢືນຖານະດ້ານການເງິນ ຂອງບໍລິສັດແມ່ຢູ່ຕ່າງປະເທດ;
7. ເອກະສານກ່ຽວຂ້ອງອື່ນ ທີ່ຈຳເປັນ.

### ມາດຕາ 8 ເງື່ອນໄຂການອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂດັ່ງນີ້:

1. ມີຖານະເປັນນິຕິບຸກຄົນ ທີ່ໄດ້ຈົດທະບຽນພາຍໃຕ້ກົດໝາຍຂອງປະເທດໃດໜຶ່ງ ທີ່ມີຖານະໝັ້ນຄົງ ທາງດ້ານທຸລະກິດ ຫຼື ສ້າງຕັ້ງເປັນນິຕິບຸກຄົນມາແລ້ວ ຢ່າງໜ້ອຍ 2 ປີ ຂຶ້ນໄປ;
2. ມີຖານະເປັນວິສາຫະກິດ ຫຼື ບໍລິສັດ ໃນຮູບແບບ ບໍລິສັດຈຳກັດ, ບໍລິສັດຈຳກັດຜູ້ດຽວ, ລັດວິ

ສາຫະກິດ ຫຼື ບໍລິສັດມະຫາຊົນ;

3. ມີການຕົກລົງ ຫຼື ມີເອກະສານສະເໜີ ຫຼື ຢັ້ງຢືນ ຈາກບໍລິສັດແມ່ຢູ່ຕ່າງປະເທດ ກ່ຽວກັບການຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ;
4. ຖ້າແມ່ນນິຕິບຸກຄົນ ຫຼື ບໍລິສັດ ທີ່ເຄີຍເປີດຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ມາກ່ອນແລ້ວ ໄລຍະການປິດຫ້ອງການຜູ້ຕາງໜ້າ ຕ້ອງບໍ່ຫຼຸດ 3 ປີ;
5. ມີເປົ້າໝາຍເຄື່ອນໄຫວທີ່ຊັດເຈນ ໂດຍສອດຄ່ອງກັບກິດຈະການເຄື່ອນໄຫວຂອງບໍລິສັດແມ່ຢູ່ຕ່າງປະເທດ ຫຼື ເປັນກິດຈະການອື່ນ ທີ່ເຫັນວ່າມີທ່າແຮງໃນການມາດຳເນີນທຸລະກິດ ແລະ/ຫຼື ສອດຄ່ອງກັບບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ໄດ້ເຊັນກັບລັດຖະບານ ສປປ ລາວ;
6. ຕ້ອງມີທຶນຈົດທະບຽນຂອງຫ້ອງການຜູ້ຕາງໜ້າ ຢ່າງໜ້ອຍບໍ່ຫຼຸດ 50.000 (ຫ້າສິບພັນ) ໂດລາສະຫະລັດ;
7. ຜູ້ຕາງໜ້າບໍລິສັດ ຕ້ອງແມ່ນຜູ້ທີ່ຖືກແຕ່ງຕັ້ງ ໂດຍບໍລິສັດແມ່ຢູ່ຕ່າງປະເທດ ເພື່ອປະຕິບັດໜ້າທີ່ຂອງຫ້ອງການຜູ້ຕາງໜ້າດັ່ງກ່າວ.

### ມາດຕາ 9 ຂັ້ນຕອນການພິຈາລະນາສ້າງຕັ້ງຫ້ອງການຜູ້ຕາງໜ້າ

ຫຼັງຈາກໄດ້ຮັບເອກະສານຄຳຮ້ອງຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ພາຍໃນ 3 ວັນລັດຖະການ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງໜັງສືຂໍຄຳເຫັນນຳຂະແໜງການກ່ຽວຂ້ອງ ເພື່ອໃຫ້ມີຄຳເຫັນພາຍໃນ 7 ວັນລັດຖະການ. ພາຍຫຼັງໄດ້ຮັບຄຳເຫັນຈາກຂະແໜງການກ່ຽວຂ້ອງ, ກົມສົ່ງເສີມການລົງທຶນ ໃນນາມ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້າພິຈາລະນາອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ຕອບປະຕິເສດ ພາຍໃນ 5 ວັນລັດຖະການ.

### ມາດຕາ 10 ການອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ

ກະຊວງແຜນການ ແລະ ການລົງທຶນ ອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ເຊັນໂດຍຫົວໜ້າກົມສົ່ງເສີມການລົງທຶນ ເພື່ອເປັນເອກະສານນິຕິກຳຢັ້ງຢືນການໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ.

ຮ່າງໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ປະກອບມີເນື້ອໃນ ດັ່ງນີ້:

- ເລກທີໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ;
- ຊື່ຫ້ອງການຜູ້ຕາງໜ້າ ໂດຍສອດຄ່ອງກັບຊື່ຂອງບໍລິສັດແມ່ຢູ່ຕ່າງປະເທດ;
- ທີ່ຕັ້ງສຳນັກງານຫ້ອງການຜູ້ຕາງໜ້າ (ຖະໜົນ, ເຮືອນເລກທີ, ບ້ານ, ເມືອງ ແລະ ແຂວງ);
- ຈຸດປະສົງຂອງການເຄື່ອນໄຫວ;
- ທຶນຈົດທະບຽນ;
- ອາຍຸ ຫຼື ກຳນົດເວລາເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າ.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງຫ້ອງການຜູ້ຕາງໜ້າ

**ມາດຕາ 11 ສິດ ຂອງຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າ ມີສິດ ດັ່ງນີ້:

1. ປະສານງານກັບບັນດາພາກສ່ວນ ຫຼື ອົງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ, ເກັບກຳຂໍ້ມູນ ແລະ ສຶກສາຊ່ອງທາງການລົງທຶນ, ເຮັດໜ້າທີ່ໃຫ້ຄຳປຶກສາ ແລະ ເປັນຜູ້ປະສານງານໃຫ້ກຸ່ມບໍລິສັດເຄືອຄ່າຍ ຫຼື ສາຂາ ຂອງບໍລິສັດແມ່ ຫຼື ປະສານງານກັບຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ເອກະຊົນ ພາຍໃຕ້ເງື່ອນໄຂຂອງບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ຢູ່ຕ່າງປະເທດໄດ້ເຊັນກັບລັດຖະບານ ໂດຍສອດຄ່ອງກັບມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;

2. ນຳສົ່ງຂໍ້ມູນການສຶກສາຊ່ອງທາງການລົງທຶນ, ຂໍ້ມູນທີ່ຕິດພັນກັບການເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ຂອງບໍລິສັດແມ່, ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ຕາມບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ໄດ້ເຊັນກັບລັດຖະບານ ໃຫ້ແກ່ບໍລິສັດແມ່ຢູ່ຕ່າງປະເທດ ໂດຍສອດຄ່ອງກັບຈຸດປະສົງ ທີ່ກຳນົດໄວ້ໃນໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງຕົນ;

3. ວ່າຈ້າງພະນັກງານລາວ ແລະ/ຫຼື ຕ່າງປະເທດ ປະຈຳຢູ່ຫ້ອງການຜູ້ຕາງໜ້າ ໂດຍຕ້ອງໃຫ້ບູລິມະສິດແກ່ພົນລະເມືອງລາວໃນການເຂົ້າເຮັດວຽກ, ພະນັກງານປະຈຳຫ້ອງການຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ ຕ້ອງບໍ່ເກີນ 2 ຄົນ;

4. ໄດ້ຮັບການປົກປ້ອງ ແລະ ຊຸກຍູ້ສົ່ງເສີມ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 12 ໜ້າທີ່ ຂອງຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າ ມີໜ້າທີ່ ດັ່ງນີ້:

1. ຖອກທຶນຈົດທະບຽນໃຫ້ຄົບ ພາຍໃນກຳນົດ 60 ວັນລັດຖະການ ນັບແຕ່ວັນໄດ້ຮັບໃບອະນຸຍາດ ສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

2. ຕ້ອງມີທີ່ຕັ້ງສຳນັກງານ ແລະ ຂຶ້ນປ້າຍຊື່ຫ້ອງການຜູ້ຕາງໜ້າຂອງຕົນ ພາຍໃນ 60 ວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ;

3. ລົງຂ່າວຜ່ານໜັງສືພິມ ຫຼື ສື່ຕ່າງໆ ເພື່ອປະກາດໃຫ້ສັງຄົມຮັບຮູ້ການເປີດຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ;

4. ເປີດບັນຊີຢູ່ທະນາຄານທຸລະກິດໃດໜຶ່ງຕາມລະບຽບການໃນນາມຫ້ອງການຜູ້ຕາງໜ້າຢູ່ ສປປ ລາວ;

5. ປະຕິບັດພັນທະດ້ານການເງິນ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ຢ່າງເຂັ້ມງວດ;

6. ສົ່ງບົດລາຍງານການເຄື່ອນໄຫວ ປະຈຳ 6 ເດືອນ, 12 ເດືອນ ໃຫ້ກົມສົ່ງເສີມການລົງທຶນ,

ກະຊວງແຜນການ ແລະ ການລົງທຶນ ຕາມແບບຟອມທີ່ກຳນົດ;

7. ສະເໜີຕໍ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ເພື່ອຂໍຮັບຮອງເມື່ອມີການປ່ຽນແປງການຈັດຕັ້ງ, ທຶນຈົດທະບຽນ, ກົດລະບຽບຫ້ອງການຜູ້ຕາງໜ້າ ແລະ ຂອບເຂດການເຄື່ອນໄຫວພາຍໃນ 30 ວັນ ນັບຈາກວັນໄດ້ຮັບການຕົກລົງ ຫຼື ການແຈ້ງການປ່ຽນແປງຈາກບໍລິສັດແມ່ຢູ່ຕ່າງປະເທດ.

## ໝວດທີ 4
## ອາຍຸ, ການຕໍ່ອາຍຸ ແລະ ການສິ້ນສຸດ ຂອງຫ້ອງການຜູ້ຕາງໜ້າ

### ມາດຕາ 13 ອາຍຸຂອງຫ້ອງການຜູ້ຕາງໜ້າ

ອາຍຸຂອງຫ້ອງການຜູ້ຕາງໜ້າ ໄດ້ກຳນົດຕາມແຕ່ລະປະເພດ ດັ່ງນີ້:

- ຫ້ອງການຜູ້ຕາງໜ້າ ປະເພດ 1 ມີອາຍຸ 1 ປີ ແລະ ສາມາດຕໍ່ໄດ້ 3 ຄັ້ງ, ຄັ້ງລະ 1 ປີ. ພາຍຫຼັງຕໍ່ຄົບ 3 ຄັ້ງແລ້ວ, ໃນກໍລະນີມີຄວາມຈຳເປັນໃນການຂໍຕໍ່ອາຍຸຫ້ອງການຜູ້ຕາງໜ້າຕື່ມອີກ ບໍລິສັດແມ່ຢູ່ຕ່າງປະເທດ ຕ້ອງສະເໜີຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ເພື່ອຄົ້ນຄວ້າລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາຮັບຮອງການຕໍ່ອາຍຸເປັນງວດ, ງວດໜຶ່ງບໍ່ເກີນ 3 ປີ ໂດຍໃບອະນຸຍາດຫ້ອງການຜູ້ຕາງໜ້າ ຈະຖືກຕໍ່ອາຍຸໃຫ້ເປັນແຕ່ລະປີ ຈົນກວ່າຈະຄົບ 3 ປີ.

- ໃນກໍລະນີ ບໍລິສັດແມ່ໄດ້ຮັບອະນຸຍາດການລົງທຶນ ແລະ ຈົດທະບຽນສ້າງຕັ້ງເປັນນິຕິບຸກຄົນຕາມກົດໝາຍ ຂອງ ສປປ ລາວ ແລ້ວ, ຫ້ອງການຜູ້ຕາງໜ້າດັ່ງກ່າວ ຕ້ອງຢຸດເຊົາການເຄື່ອນໄຫວ ແລະ ແຈ້ງການ ປິດຫ້ອງການຜູ້ຕາງໜ້າ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ.

- ຫ້ອງການຜູ້ຕາງໜ້າ ປະເພດທີ 2 ມີອາຍຸ 1 ປີ ແລະ ສາມາດຕໍ່ໄດ້ ຕາມອາຍຸຂອງບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ທີ່ບໍລິສັດແມ່ຢູ່ຕ່າງປະເທດ ໄດ້ເຊັນກັບລັດຖະບານ ໂດຍຕໍ່ໃຫ້ຄັ້ງລະ 1 ປີ ແລະ ເມື່ອໃດບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາໂຄງການສິ້ນສຸດອາຍຸລົງ ຫ້ອງການຜູ້ຕາງໜ້າດັ່ງກ່າວ ຕ້ອງຢຸດເຊົາການເຄື່ອນໄຫວ ແລະ ແຈ້ງການປິດຫ້ອງການຜູ້ຕາງໜ້າ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ.

### ມາດຕາ 14 ການປະກອບເອກະສານ ຂໍຕໍ່ອາຍຸຫ້ອງການຜູ້ຕາງໜ້າ

ການສະເໜີຂໍຕໍ່ອາຍຸຫ້ອງການຜູ້ຕາງໜ້າ ຕ້ອງປະກອບມີບັນດາເອກະສານ ດັ່ງນີ້:

1. ໃບສະເໜີ ຫຼື ຄຳຮ້ອງຂໍຕໍ່ອາຍຸໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ;
2. ໃບສະເໜີ ຫຼື ຂໍ້ຕົກລົງຂອງບໍລິສັດແມ່ຢູ່ຕ່າງປະເທດ ກ່ຽວກັບການຕໍ່ອາຍຸຫ້ອງການຜູ້ຕາງໜ້າ;
3. ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ສະບັບຕົ້ນ;
4. ສຳເນົາໃບທະບຽນອາກອນ ແລະ ເອກະສານຢັ້ງຢືນການປະຕິບັດພັນທະຕ່າງໆ;
5. ໃບຢັ້ງຢືນການນຳເຂົ້າທຶນຈົດທະບຽນ ຈາກທະນາຄານ ແຫ່ງ ສປປ ລາວ;

6. ບົດລາຍງານການເຄື່ອນໄຫວປະຈຳປີ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ;

7. ເອກະສານກ່ຽວຂ້ອງອື່ນ ທີ່ຈຳເປັນ.

**ມາດຕາ 15 ເງື່ອນໄຂການຕໍ່ອາຍຸຫ້ອງການຜູ້ຕາງໜ້າ**

1. ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸຫ້ອງການຜູ້ຕາງໜ້າ ຢ່າງຊ້າ 30 ວັນ ກ່ອນວັນໝົດອາຍຸໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ;

2. ຕ້ອງປະກອບເອກະສານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16 ການສິ້ນສຸດຂອງຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າ ຈະສິ້ນສຸດການເຄື່ອນໄຫວ ໃນກໍລະນີ ດັ່ງນີ້:

1. ໝົດອາຍຸຂອງຫ້ອງການຜູ້ຕາງໜ້າ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ແຈ້ງປິດຫ້ອງການຜູ້ຕາງໜ້າຂອງຕົນ ໂດຍຄວາມສະໝັກໃຈ ໂດຍບໍລິສັດແມ່ຢູ່ຕ່າງປະເທດ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕາມການມອບໝາຍຂອງບໍລິສັດແມ່;

3. ບໍລິສັດແມ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງເປັນນິຕິບຸກຄົນ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ;

4. ກໍລະນີ ຖືກສັ່ງປິດ ຫຼື ຖອນໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ.

ຫ້ອງການຜູ້ຕາງໜ້າ ທີ່ສິ້ນສຸດການເຄື່ອນໄຫວ ໃນຮູບການທີ່ກ່າວມາຂ້າງເທິງນັ້ນ ຕ້ອງນຳສົ່ງໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ (ສະບັບຕົ້ນ) ໃຫ້ກົມສົ່ງເສີມການລົງທຶນ ພາຍໃນກຳນົດເວລາ 10 ວັນ ລັດຖະການ ນັບແຕ່ວັນສິ້ນສຸດການເຄື່ອນໄຫວ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານ ມີການກະທຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ຮັບສິນບົນຈາກຫ້ອງການຜູ້ຕາງໜ້າ;

3. ແກ່ຍາວເວລາໃນການພິຈາລະນາເອກະສານຕ່າງໆ ໂດຍບໍ່ມີເຫດຜົນ;

4. ມີການກະທຳອື່ນ ທີ່ເປັນການລະເມີດຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສຳລັບຫ້ອງການຜູ້ຕາງໜ້າ**

ຫ້າມຫ້ອງການຜູ້ຕາງໜ້າ ມີການກະທຳ ດັ່ງນີ້:

1. ເຄື່ອນໄຫວດຳເນີນທຸລະກິດ ທີ່ສ້າງລາຍຮັບ ແລະ ຜົນກຳໄລ;

2. ດຳເນີນກິດຈະກຳການໂຄສະນາຂາຍສິນຄ້າ, ບໍລິການ ຫຼື ຜະລິດຕະພັນຕ່າງໆທຸກຮູບແບບ;
3. ເອົາໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ໃຫ້ຜູ້ອື່ນນຳໃຊ້, ປ່ຽນແປງ ຫຼື ປອມແປງໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ;
3. ອອກໃບຮັບເງິນ ຫຼື ໃບຮຽກເກັບເງິນ ສຳລັບລາຍໄດ້ ຫຼື ລາຍຮັບຕ່າງໆ;
4. ມີການກະທຳອື່ນ ທີ່ເປັນການລະເມີດຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ຕິດຕາມກວດກາ

### ມາດຕາ 19 ອົງການຄຸ້ມຄອງ ແລະ ຕິດຕາມກວດກາ

ອົງການຄຸ້ມຄອງ ແລະ ຕິດຕາມກວດກາ ຫ້ອງການຜູ້ຕາງໜ້າ ຂອງນິຕິບຸກຄົນຕ່າງປະເທດ ຢູ່ ສປປ ລາວ ແມ່ນຂະແໜງແຜນການ ແລະ ການລົງທຶນ ໂດຍມອບໃຫ້ກົມສົ່ງເສີມການລົງທຶນ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 20 ການຕິດຕາມກວດກາ

ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ມີໜ້າທີ່ໂດຍກົງໃນການຕິດຕາມກວດກາການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າ, ການຕິດຕາມກວດກາ ແບ່ງອອກເປັນ 3 ປະເພດ ຄື:

- ກວດກາປົກກະຕິ ທຸກໆ 6 ເດືອນ;
- ກວດກາເວລາມີການຂໍຕໍ່ອາຍຸ;
- ກວດກາສຸກເສີນ ໃນກໍລະນີມີຂໍ້ມູນການລະເມີດຂອບເຂດສິດ ທີ່ກຳນົດໄວ້ໃນໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 21 ມາດຕະການລວມຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ, ລະບຽບການ ແລະ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມກົດໝາຍ.

### ມາດຕາ 22 ມາດຕະການສະເພາະຕໍ່ຫ້ອງການຜູ້ຕາງໜ້າ

ຫ້ອງການຜູ້ຕາງໜ້າ ຂອງນິຕິບຸກຄົນຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ຫາກລະເມີດຂໍ້ຫ້າມທີ່ລະບຸ

ໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງປີ 2016 ແລະ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມຂັ້ນຕອນ ດັ່ງນີ້:

1. ກ່າວເຕືອນ ຢ່າງເປັນລາຍລັກອັກສອນ ເພື່ອໃຫ້ແກ້ໄຂພາຍໃນກຳນົດ 30 ວັນ;

2. ກໍລະນີບໍ່ມີການແກ້ໄຂ ຕາມການກ່າວເຕືອນ ໂດຍບໍ່ມີເຫດຜົນ, ກົມສົ່ງເສີມການລົງທຶນ ມີສິດອອກໜັງສືແຈ້ງໂຈະການເຄື່ອນໄຫວຊົ່ວຄາວ ແລະ/ຫຼື ປັບໃໝ ຫ້ອງການຜູ້ຕາງໜ້າດັ່ງກ່າວ;

3. ແຈ້ງຖອນໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າໃນກໍລະນີຫາກຍັງບໍ່ປະຕິບັດຕາມການແຈ້ງເຕືອນ ແລະ ແຈ້ງໂຈະການເຄື່ອນໄຫວ ໂດຍບໍ່ມີເຫດຜົນພຽງພໍ.

ສໍາລັບຫ້ອງການຜູ້ຕາງໜ້າ ທີ່ລະເມີດຂໍ້ຫ້າມ ແລະ ບໍ່ມີການແກ້ໄຂຕາມການກ່າວເຕືອນ ໂດຍບໍ່ມີເຫດຜົນ ຈະຖືກປັບໃໝ ດັ່ງນີ້:

- ກໍລະນີ ກວດພົບວ່າມີການເຄື່ອນໄຫວ ຫຼື ດໍາເນີນທຸລະກິດ ທີ່ສ້າງລາຍຮັບ ແລະ ຜົນກໍາໄລ ຈະຖືກ ປັບໃໝ 5.000 ໂດລາສະຫະລັດ;

- ກໍລະນີ ກວດພົບວ່າມີການດໍາເນີນກິດຈະກໍາການໂຄສະນາຂາຍສິນຄ້າ, ບໍລິການ ຫຼື ຜະລິດຕະພັນຕ່າງໆ ຈະຖືກປັບໃໝ 5.000 ໂດລາສະຫະລັດ;

- ກໍລະນີ ກວດພົບວ່າມີການປ່ຽນແປງ ຫຼື ປອມແປງ ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ຈະຖືກປັບໃໝ 3.000 ໂດລາສະຫະລັດ;

- ກໍລະນີ ກວດພົບວ່າເອົາໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ໃຫ້ຜູ້ອື່ນຢືມ ຫຼື ນໍາໃຊ້ ຈະຖືກປັບໃໝ 2.000 ໂດລາສະຫະລັດ;

- ກໍລະນີ ກວດພົບວ່າມີການອອກໃບຮັບເງິນ ຫຼື ໃບຮຽກເກັບເງິນ ສໍາລັບລາຍໄດ້ ຫຼື ລາຍຮັບຕ່າງໆ ຈະຖືກປັບໃໝ 1.000 ໂດລາສະຫະລັດ;

ໃນກໍລະນີມີການລະເມີດຄັ້ງທີ 2 ຈະຖືກປັບໃໝສອງເທົ່າຕົວ ແລະ ກໍລະນີມີການລະເມີດ ຄັ້ງທີ 3 ກໍຈະຖືປັບໃໝສາມເທົ່າຕົວ ພ້ອມທັງແຈ້ງປິດຫ້ອງການຜູ້ຕາງໜ້າດັ່ງກ່າວ ໂດຍບໍ່ມີເງື່ອນໄຂ ແລະ ບໍລິສັດແມ່ ຂອງຫ້ອງການຜູ້ຕາງໜ້ານັ້ນ ຈະບໍ່ມີສິດສະເໜີຂໍ້ສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ໄດ້ອີກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 23 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ໂດຍປະສານສົມທົບກັບ

ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ຫຼັງຈາກ 15 ວັນ ນັບແຕ່ວັນລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.



**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

ຂັ້ນສູນກາງ ເລກທີ 002 /ຄລທ.ສ

ນະຄອນຫຼວງວຽງຈັນ, ວັນທີ 20 ສິງຫາ 2018

# ຂໍ້ຕົກລົງ

# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018;
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018;
- ອີງຕາມ ການສະເໜີ ຂອງກະຊວງ ແຜນການ ແລະ ການລົງທຶນ, ສະບັບເລກທີ 1933/ກຜທ, ລົງວັນທີ 13 ສິງຫາ 2018;

**ປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນ,

ຫຼຸດຜ່ອນບັນດາຂອດຂັ້ນການພິຈາລະນາອະນຸມັດຂອງຂະແໜງການພາກລັດ ເຮັດໃຫ້ການພິຈາລະນາອະນຸມັດການລົງທຶນ ແລະ ການສົ່ງເສີມການລົງທຶນ ເປັນລະບົບຕາມກົນໄກປະຕູດຽວ, ໂປ່ງໃສ, ວ່ອງໄວ, ມີປະສິດທິພາບ, ສາມາດແຂ່ງຂັນ ແລະ ດຶງດູດການລົງທຶນທີ່ມີ ຄຸນນະພາບໄດ້.

**ມາດຕາ 2 ການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານປະຕູດຽວ**

ການບໍລິການ ການລົງທຶນປະຕູດຽວ ແມ່ນການເຄື່ອນໄຫວແບບລວມສູນ ໃນການບໍລິການການລົງທຶນ ໃຫ້ແກ່ຜູ້ລົງທຶນ ທີ່ລົງທຶນໃນກິດຈະການ ທົ່ວໄປ, ສໍາປະທານ ແລະ ພັດທະນາເຂດເສດຖະກິດພິເສດ ໃຫ້ມີຄວາມກະທັດຮັດ, ສະດວກ, ວ່ອງໄວ, ໂປ່ງໃສ ແລະ ທັນການ.

ໜ່ວຍງານປະສານງານປະຕູດຽວ ແມ່ນໜ່ວຍງານປະຈໍາການ ຢູ່ຂະແໜງການກ່ຽວຂ້ອງ ໂດຍໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍຈາກເຈົ້າກະຊວງ, ອົງການລັດທຽບເທົ່າກະຊວງ ເພື່ອເຮັດໜ້າທີ່ປະສານງານການບໍລິການ ການລົງທຶນປະຕູດຽວ ທີ່ກ່ຽວຂ້ອງກັບແຕ່ລະຂະແໜງການ.

## ໝວດທີ 2
### ໜ້າທີ່, ຂອບເຂດສິດ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ

**ມາດຕາ 3 ໜ້າທີ່**

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ມີໜ້າທີ່ ດັ່ງນີ້:

1. ອະທິບາຍຊີ້ແຈງດ້ານກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການລົງທຶນ ໃຫ້ຜູ້ລົງທຶນ ທີ່ສົນໃຈລົງທຶນ ຢູ່ ສປປ ລາວ;
2. ເກັບກໍາ, ລວບລວມ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບການລົງທຶນ ໃຫ້ແກ່ຜູ້ລົງທຶນ ໂດຍການປະສານງານກັບບັນດາຂະແໜງການກ່ຽວຂ້ອງ;
3. ອະທິບາຍ ແລະ ແນະນໍາວິທີການປະກອບເອກະສານຕາມແບບພິມທີ່ໄດ້ກໍານົດ;
4. ຮັບຄໍາຮ້ອງ ແລະ ກວດກາຄວາມຖືກຕ້ອງຄົບຖ້ວນຂອງເອກະສານຂໍລົງທຶນ, ຂໍນະໂຍບາຍສົ່ງເສີມ, ຂໍປ່ຽນແປງພື້ນຖານນິຕິກໍາຕ່າງໆ ໃນກິດຈະການຄວບຄຸມ, ກິດຈະການສໍາປະທານ, ການພັດທະນາເຂດເສດຖະກິດພິເສດ, ການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ, ການອອກໄປລົງທຶນ ຢູ່ຕ່າງປະເທດ ແລະ ການສ້າງຕັ້ງຫ້ອງການຜູ້ຕາງໜ້າ;
5. ຮັບ ແລະ ບໍລິການຄໍາຮ້ອງຂໍວີຊາທຸລະກິດ, ບັດແຮງງານ ແລະ ບັດພັກເຊົາຂອງຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມະຊິກຄອບຄົວ, ວິຊາການ, ຜູ້ຊ່ຽວຊານ ແລະ ແຮງງານຕ່າງປະເທດ;

6. ອອກໃບຢັ້ງຢືນການຮັບເອກະສານ ພາຍຫຼັງທີ່ໄດ້ກວດກາຄວາມຖືກຕ້ອງຄົບຖ້ວນ ຕາມແບບພິມທີ່ໄດ້ກຳນົດໄວ້ ແລະ ລະບຸວັນເວລາການນັດໝາຍມາຮັບເອົາຄຳຕອບຕໍ່ເອກະສານທີ່ຜູ້ລົງທຶນ ຫຼື ວິສາຫະກິດໄດ້ສະເໜີ;
7. ປະສານສົມທົບ ແລະ ນຳສົ່ງເອກະສານ ຫຼື ຄຳຮ້ອງຕ່າງໆໃຫ້ຂະແໜງການກ່ຽວຂ້ອງ ພິຈາລະນາ ມີຄຳເຫັນຕາມລະບຽບການ;
8. ຈັດກອງປະຊຸມວິຊາການ ເພື່ອພິຈາລະນາຄຳຮ້ອງ, ຄຳສະເໜີຂອງຜູ້ລົງທຶນ ກ່ຽວກັບວຽກງານລົງທຶນ ກ່ອນນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງພິຈາລະນາຕົກລົງ;
9. ເຮັດໜ້າທີ່ເປັນກອງເລຂາຊ່ວຍວຽກ ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຊຶ່ງມີລາຍລະອຽດໜ້າວຽກ ດັ່ງນີ້:

- ກະກຽມວາລະ ແລະ ເນື້ອໃນກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;
- ສັງລວມບັນດາເອກະສານສຳລັບກອງປະຊຸມ ກ່ອນນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາຈັດກອງປະຊຸມ;
- ອອກຈົດໝາຍເຊີນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຂະແໜງການກ່ຽວຂ້ອງເຂົ້າຮ່ວມກອງປະຊຸມ;
- ຄົ້ນຄວ້າການສະເໜີຂອງຜູ້ລົງທຶນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 3 ຂໍ້ 4, ເພື່ອນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງ;
- ຮ່າງບົດບັນທຶກກອງປະຊຸມ ແລະ ນຳສົ່ງມະຕິກອງປະຊຸມ (ບົດບັນທຶກກອງປະຊຸມທີ່ຖືກຮັບຮອງແລ້ວ)ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຂະແໜງການກ່ຽວຂ້ອງ;

10. ປະສານງານເອົາໃບທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ, ໃບທະບຽນອາກອນ ຫຼື ເລກລະຫັດປະຈຳຕົວຜູ້ເສຍອາກອນ ນຳຂະແໜງການການເງິນ ແລະ ໃບອະນຸຍາດດຳເນີນກິດຈະການນຳຂະແໜງການກ່ຽວຂ້ອງ;
11. ມອບຈົດໝາຍຕອບຜູ້ລົງທຶນ, ໃບອະນຸຍາດລົງທຶນ, ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ, ໃບສົ່ງເສີມການລົງທຶນ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງໃຫ້ແກ່ຜູ້ລົງທຶນ;
12. ປະສານງານກັບພາກສ່ວນຕ່າງໆ ແລະ ໜ່ວຍງານປະສານງານປະຕູດຽວ ຂອງຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ເພື່ອຮັບປະກັນຄວາມວ່ອງໄວ ແລະ ໂປ່ງໃສ ໃນການໃຫ້ບໍລິການການລົງທຶນປະຕູດຽວ;
13. ປະສານງານຕາມສາຍຕັ້ງ ລະຫວ່າງ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂອງສູນກາງ

ແລະ ທ້ອງຖິ່ນ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ, ສ້າງຄວາມວ່ອງໄວ ແລະ ມີປະສິດທິພາບໃນວຽກງານບໍລິການ ການລົງທຶນປະຕູດຽວ ໃຫ້ນັບມື້ນັບດີຂຶ້ນ;

14. ເປັນໃຈກາງປະສານງານກັບຂະແໜງການກ່ຽວຂ້ອງ ໃນການຄົ້ນຄວ້າ, ປັບປຸງ ແລະ ແກ້ໄຂຂອດຂັ້ນການອອກອະນຸຍາດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ, ອຳນວຍຄວາມສະດວກໃນການດຳເນີນທຸລະກິດຂອງພາກເອກະຊົນ ຢູ່ ສປປ ລາວ ໃຫ້ມີປະສິດທິພາບ ແນ່ໃສ່ຫຼຸດຜ່ອນລະດັບຄວາມຫຍຸ້ງຍາກ ກໍຄື ຍົກລະດັບຕົວຊີ້ວັດຄວາມງ່າຍດາຍໃນການດຳເນີນທຸລະກິດ ຢູ່ ສປປ ລາວ ໃຫ້ດີຂຶ້ນ;
15. ໃຫ້ການແນະນຳ ຫຼື ຊ່ວຍເຫຼືອເບື້ອງຕົ້ນ ໃນການແກ້ໄຂບັນຫາ ຫຼື ຄຳຮ້ອງທຸກ ທີ່ພົວພັນກັບການລົງທຶນ ເພື່ອຫຼີກເວັ້ນການເກີດມີຂໍ້ຂັດແຍ່ງທີ່ຈະນຳໄປສູ່ການຮ້ອງຟ້ອງ ຫຼື ເຂົ້າສູ່ຂະບວນການຍຸຕິທຳ ໂດຍມີການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
16. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ສະເໜີທິດທາງໃນການປັບປຸງວຽກງານການໃຫ້ບໍລິການ ການລົງທຶນປະຕູດຽວ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາ ແລະ ໃຫ້ຄຳຊີ້ນຳໃນແຕ່ລະໄລຍະ;
17. ຕິດຕາມ, ກວດກາບັນດາໂຄງການທີ່ໄດ້ອອກອະນຸຍາດລົງທຶນ ແລ້ວລາຍງານຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ໃນແຕ່ລະໄລຍະ;
18. ເປັນໃຈກາງໃນການສະຫຼຸບສັງລວມວຽກງານການບໍລິການການລົງທຶນປະຕູດຽວໃນຂອບເຂດທົ່ວປະເທດ ເພື່ອລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ;
19. ເຂົ້າຮ່ວມ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

### ມາດຕາ 4 ຂອບເຂດສິດ

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ມີສິດ ດັ່ງນີ້:

1. ອອກຈົດໝາຍແຈ້ງທວງເອົາຄຳເຫັນຈາກຂະແໜງການກ່ຽວຂ້ອງ ກ່ຽວກັບວຽກງານລົງທຶນ;
2. ເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປຶກສາຫາລື, ແນະນຳການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;
3. ຄົ້ນຄວ້າ ແລະ ນຳສະເໜີຄຳເຫັນໃນການປັບປຸງ ກ່ຽວກັບວຽກງານການບໍລິການ ການລົງທຶນປະຕູດຽວ ເພື່ອຮັບປະກັນຄວາມວ່ອງໄວ ແລະ ໂປ່ງໃສ;
4. ເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມລະບຽບການ;

5. ປະຕິບັດສິດອື່ນ ຕາມການມອບໝາຍ ຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ.

**ມາດຕາ 5 ຂອບເຂດການບໍລິການ**

ຂອບເຂດການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ປະກອບມີ:

1. ບໍລິການ ການຂໍອະນຸຍາດລົງທຶນ, ການຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ, ຂໍຂຶ້ນທະບຽນວິສາຫະກິດ, ທະບຽນອາກອນ, ອະນຸຍາດເຄື່ອນໄຫວກິດຈະການ ແລະ ຂໍນະໂຍບາຍສົ່ງເສີມ;
2. ບໍລິການ ຂໍວີຊາທຸລະກິດ, ວີຊາເຂົ້າ-ອອກຫຼາຍເທື່ອ, ບັດແຮງງານ ແລະ ບັດພັກເຊົາ;
3. ບໍລິການ ການຂໍປ່ຽນແປງທາງດ້ານພື້ນຖານນິຕິກຳຕ່າງໆຂອງວິສາຫະກິດ ທີ່ລົງທຶນໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ການພັດທະນາເຂດເສດຖະກິດພິເສດ, ການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ, ການອອກໄປລົງທຶນຢູ່ຕ່າງປະເທດ ແລະ ຫ້ອງການຜູ້ຕາງໜ້າ;
4. ບໍລິການ ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບການລົງທຶນ;
5. ບໍລິການ ອອກໃບຢັ້ງຢືນຄວັດຕາປະທັບ ໃຫ້ບັນດາວິສາຫະກິດ;
6. ບໍລິການ ພົວພັນເອົາໃບທະບຽນວິສາຫະກິດ ຫຼື ໃບທະບຽນອາກອນ ແລະ/ຫຼື ໃບອະນຸ ຍາດດຳເນີນທຸລະກິດໃນກິດຈະການຄວບຄຸມ, ກິດຈະການສຳປະທານ, ການພັດທະນາເຂດເສດຖະກິດພິເສດ, ການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ແລະ ຫ້ອງການຜູ້ຕາງໜ້າ;
7. ບໍລິການມອບຈົດໝາຍຕອບຜູ້ລົງທຶນ, ມອບໃບອະນຸຍາດລົງທຶນ, ມອບໃບອະນຸຍາດຫ້ອງການຜູ້ຕາງໜ້າ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ;
8. ບໍລິການອື່ນທີ່ຕິດພັນກັບວຽກງານສົ່ງເສີມການລົງທຶນ;

**ມາດຕາ 6 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ປະກອບມີ:

1. ຄະນະວິຊາການປະຕູດຽວ ຊຶ່ງປະກອບດ້ວຍ ກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ ແລະ ຜູ້ຕາງໜ້າທີ່ບໍ່ປະຈຳການ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກະຊວງປ້ອງກັນຄວາມສະຫງົບ;

2. ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ທີ່ຕັ້ງຢູ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ປະກອບມີ 2 ພະແນກ ຄື:

- ພະແນກ ຄົ້ນຄວ້າ, ວິໄຈໂຄງການ ແລະ ກອງເລຂາ;
- ພະແນກ ບໍລິການ ການລົງທຶນປະຕູດຽວ.

## ມາດຕາ 7 ໂຄງປະກອບບຸກຄະລາກອນ

ຄະນະຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ປະກອບມີ:

ຫົວໜ້າກົມສົ່ງເສີມການລົງທຶນ ເປັນຫົວໜ້າຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ໂດຍຕຳແໜ່ງ, ຊຶ່ງໃນນີ້:

ຄະນະວິຊາການບໍ່ປະຈຳການ ປະກອບດ້ວຍ ຫົວໜ້າກົມ ຫຼື ຮອງຫົວໜ້າກົມຈາກກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກະຊວງປ້ອງກັນຄວາມສະຫງົບ.

## ມາດຕາ 8 ລະບອບການປະຊຸມ

ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ຈັດກອງປະຊຸມວິຊາການປະຈຳອາທິດຢ່າງໜ້ອຍອາທິດລະໜຶ່ງຄັ້ງ ເພື່ອຄົ້ນຄວ້າການສະເໜີຂອງຜູ້ລົງທຶນ ຫຼື ບັນຫາກ່ຽວກັບວຽກງານການລົງທຶນ, ກ່ອນນຳສະເໜີຕໍ່ກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ພິຈາລະນາ.

## ມາດຕາ 9 ວາລະການປະຊຸມ

ບັນຫາທີ່ສະເໜີເຂົ້າໃນ ວາລະກອງປະຊຸມ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ມີດັ່ງນີ້:

1. ຄຳຮ້ອງຂໍລົງທຶນ ແລະ ຂໍອອກໄປລົງທຶນຢູ່ຕ່າງປະເທດ;
2. ສະເໜີຂໍດັດແກ້ສັນຍາ, ດັດແກ້ກິດຈະການລົງທຶນ ແລະ ປ່ຽນແປງທາງດ້ານພື້ນຖານນິຕິກຳຕ່າງໆ ຂອງວິສາຫະກິດ ແລະ ໂຄງການທີ່ໄດ້ອະນຸຍາດລົງທຶນ;
3. ລາຍງານສະພາບຄວາມຄືບໜ້າໃນການຈັດຕັ້ງປະຕິບັດສັນຍາ ກໍ່ຄືໂຄງການລົງທຶນ;
4. ລາຍງານສະພາບຂໍ້ຂັດແຍ່ງຕ່າງໆ ຫຼື ການແກ້ໄຂຂໍ້ຂ້ອງໃຈຂອງຜູ້ລົງທຶນ ແລະ ພາກສ່ວນຕ່າງໆ ຈາກພາກລັດ ແລະ ເອກະຊົນ ທີ່ມີຕໍ່ໂຄງການລົງທຶນ;
5. ຂໍ້ສະເໜີ ຂອງ ແຕ່ລະຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ພົວພັນກັບວຽກ

ງານສົ່ງເສີມການລົງທຶນ;

6. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຄັ້ງຜ່ານມາ;
7. ລາຍງານສະຖິຕິການລົງທຶນປະຈໍາເດືອນ;
8. ພິຈາລະນາວຽກງານ ທີ່ພົວພັນກັບການສົ່ງເສີມການລົງທຶນ ແລະ ບັນຫາອື່ນໆ;
9. ສັງລວມເນື້ອໃນບົດລາຍງານ ຕີລາຄາສະພາບການໃຫ້ບໍລິການ ຂອງຫ້ອງການບໍລິການການ ລົງທຶນປະຕູດຽວ ຂັ້ນສູນກາງ ແລະ ທ້ອງຖິ່ນ.

ທຸກເອກະສານທີ່ຮັບໃຊ້ກອງປະຊຸມ ( ວາລະກອງປະຊຸມ ແລະ ເອກະສານເນື້ອໃນກອງປະຊຸມ ) ຕ້ອງສົ່ງເຖິງ ຄະນະຫ້ອງການບໍລິການ ການລົງທຶນປະຕູດຽວ ຢ່າງໜ້ອຍ 2 ວັນ, ກ່ອນນີ້ ເປີດກອງປະຊຸມ.

## ໝວດທີ 3

## ໜ້າທີ່, ຂອບເຂດສິດ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງໜ່ວຍງານ ປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ

### ມາດຕາ 10 ໜ້າທີ່

ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ມີໜ້າທີ່ ດັ່ງນີ້:

1. ອະທິບາຍຊີ້ແຈງດ້ານກົດໝາຍ ແລະ ລະບຽບການຕ່າງໆ ໃນຂະແໜງການຂອງຕົນໃຫ້ຜູ້ ລົງທຶນທີ່ສົນໃຈລົງທຶນ ຢູ່ ສປປ ລາວ;
2. ເກັບກໍາ, ລວບລວມ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບການລົງທຶນ ທີ່ຕິດພັນກັບຂະ ແໜງການຕົນ ໃຫ້ແກ່ຜູ້ລົງທຶນ ໂດຍການປະສານງານກັບຫ້ອງການບໍລິການ ການລົງທຶນປະຕູ ດຽວ;
3. ອະທິບາຍ ແລະ ແນະນໍາວິທີການປະກອບເອກະສານ ທີ່ຕິດພັນກັບຂະແໜງການຕົນ ໃຫ້ແກ່ຜູ້ ລົງທຶນຕາມແບບພິມທີ່ໄດ້ກໍານົດ;
4. ປະສານງານກ່ຽວກັບການບໍລິການ ການລົງທຶນ ທີ່ຕິດພັນກັບບັນດາກົມກອງໃນຂະແໜງການ ຕົນໃຫ້ແກ່ຫ້ອງການບໍລິການ ການລົງທຶນປະຕູດຽວ;
5. ປະສານສົມທົບ ແລະ ຕິດຕາມເອົາຄໍາເຫັນຂອງຂະແໜງການຕົນ ນໍາສົ່ງໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົບຖ້ວນ ແລະ ທັນຕາມເວລາທີ່ກໍານົດ;
6. ເຂົ້າຮ່ວມກອງປະຊຸມວິຊາການ ທີ່ຫ້ອງການບໍລິການການລົງທຶນປະຕູດຽວຈັດຂຶ້ນ ເພື່ອ ພິຈາລະນາ ຄໍາຮ້ອງ, ຄໍາສະເໜີຂອງຜູ້ລົງທຶນ ກ່ຽວກັບວຽກງານລົງທຶນ ກ່ອນນໍາສະເໜີຕໍ່ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາຕົກລົງ;

7. ເຮັດໜ້າທີ່ເປັນກອງເລຂາຊ່ວຍວຽກ ໃຫ້ແກ່ ລັດຖະມົນຕີ ຫຼື ຮອງລັດຖະມົນຕີ ທີ່ເປັນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຕາມຂະແໜງການຕົນ;
8. ປະສານງານຕາມສາຍຕັ້ງ ລະຫວ່າງ ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວຂອງສູນກາງ ແລະ ທ້ອງຖິ່ນ ຕາມຂະແໜງການຕົນ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ, ສ້າງຄວາມວ່ອງໄວ ແລະ ມີປະສິດທິພາບໃນວຽກງານ ບໍລິການ ການລົງທຶນປະຕູດຽວໃຫ້ນັບມື້ນັບດີຂຶ້ນ;
9. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ສະເໜີຄຳຄິດເຫັນໃນການປັບປຸງວຽກງານ ການໃຫ້ ບໍລິການ ການລົງທຶນປະຕູດຽວ ທີ່ຕິດພັນກັບຂະແໜງການຕົນ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອພິຈາລະນາ ແລະ ໃຫ້ຄຳຊີ້ນຳໃນແຕ່ລະໄລຍະ;
10. ເຂົ້າຮ່ວມ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມຂະແໜງການຕົນ.

### ມາດຕາ 11 ຂອບເຂດສິດ

ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ມີສິດ ດັ່ງນີ້:

1. ທວງເອົາຄຳເຫັນຈາກກົມກອງອ້ອມຂ້າງຂອງຂະແໜງການຕົນ ທີ່ກ່ຽວຂ້ອງກ່ຽວກັບວຽກງານການລົງທຶນ ເພື່ອນຳສົ່ງໃຫ້ແກ່ ຫ້ອງການບໍລິການການລົງທຶນປະຕູດຽວ;
2. ເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນຂະແໜງການຕົນ ມາປະຊຸມ ເພື່ອປຶກສາຫາລື, ຊີ້ແຈງ ແລະ ແນະນຳ ການຈັດຕັ້ງປະຕິບັດວຽກງານບໍລິການ ການລົງທຶນປະຕູດຽວ;
3. ເຂົ້າຮ່ວມຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຕໍ່ກອງປະຊຸມວິຊາການທີ່ຫ້ອງການບໍລິການການລົງທຶນປະຕູດຽວຈັດຂຶ້ນ ເພື່ອພິຈາລະນາຄຳຮ້ອງ, ຄຳສະເໜີຂອງຜູ້ລົງທຶນກ່ຽວກັບວຽກງານລົງທຶນ ກ່ອນນຳສະເໜີຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງພິຈາລະນາຕົກລົງ;
4. ຄົ້ນຄວ້າ ແລະ ປະກອບຄຳຄິດເຫັນ ຕໍ່ການປັບປຸງວຽກງານປະສານງານການບໍລິການ ການລົງທຶນປະຕູດຽວ ເພື່ອຮັບປະກັນຄວາມວ່ອງໄວ ແລະ ໂປ່ງໃສ;
5. ປະຕິບັດສິດອື່ນ ຕາມການມອບໝາຍ ຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ຕາມຂະແໜງການຕົນ.

### ມາດຕາ 12 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງໜ່ວຍງານ ປະສານງານການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງປະກອບມີ:

1. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງແຜນການ ແລະ ການ

ລົງທຶນ;

2. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
3. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງການເງິນ;
4. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
5. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງພະລັງງານ ແລະ ບໍ່ແຮ່;
6. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງກະສິກຳ ແລະ ປ່າໄມ້;
7. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
8. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ;
9. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
10. ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 13 ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນທີ່ເຮັດໜ້າທີ່ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ປະກອບມີຄະນະກົມ, ຄະນະພະແນກ ຫຼື ວິຊາການຂອງກົມກອງກ່ຽວຂ້ອງຂອງແຕ່ລະຂະແໜງການ ຕາມການແຕ່ງຕັ້ງມອບໝາຍ ຂອງລັດຖະມົນຕີ ຫຼື ຮອງລັດຖະມົນຕີ ທີ່ເປັນ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ.

**ມາດຕາ 14 ລະບອບການປະຊຸມ**

ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ປະຈຳແຕ່ລະກະຊວງ, ຈັດກອງປະຊຸມວິຊາການປະຈຳອາທິດຢ່າງໜ້ອຍອາທິດລະໜຶ່ງຄັ້ງ, ເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ການສະເໜີຂອງຜູ້ລົງທຶນ ຫຼື ບັນຫາກ່ຽວກັບວຽກງານການລົງທຶນຕາມຂະແໜງການຕົນ ກ່ອນນຳສົ່ງ ໃຫ້ຫ້ອງການບໍລິການ ການລົງທຶນປະຕູດຽວ ຫຼື ກ່ອນນຳສະເໜີຕໍ່ກອງປະຊຸມວິຊາການ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ.

## ໝວດທີ 4

## ຫຼັກການ, ແບບແຜນວິທີເຮັດວຽກ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 15 ຫຼັກການບໍລິການ

1. ເປັນສູນລວມການບໍລິການ ການລົງທຶນໃຫ້ແກ່ຜູ້ລົງທຶນ ທີ່ລົງທຶນໃນກິດຈະການທົ່ວໄປ, ຄວບຄຸມ, ສໍາປະທານ, ການລົງທຶນຮ່ວມພາກລັດ ແລະ ເອກະຊົນ ແລະ ການພັດທະນາເຂດເສດຖະກິດພິເສດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
2. ຜູ້ລົງທຶນສະເໜີລົງທຶນຢູ່ບ່ອນໃດ ແມ່ນໄດ້ຮັບຄໍາຕອບຢູ່ບ່ອນນັ້ນ, ການໃຫ້ຄໍາຕອບແກ່ຜູ້ລົງທຶນ ຕ້ອງປະຕິບັດຕາມກໍານົດເວລາທີ່ບົ່ງໄວ້ໃນລະບຽບການທີ່ປະກາດແຈ້ງ ຢູ່ຫ້ອງການບໍລິການ ການລົງທຶນປະຕູດຽວ;
3. ເປັນເຈົ້າການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;
4. ລວມສູນການເກັບກໍາຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດ, ສັງລວມຕີລາຄາປະເມີນຜົນ ສະພາບການລົງທຶນ ແລະ ໂຄງການລົງທຶນຂອງພາກເອກະຊົນ;
5. ການຕົກລົງບັນຫາຕ່າງໆ ກ່ຽວກັບການລົງທຶນ ຕ້ອງຜ່ານກອງປະຊຸມຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

### ມາດຕາ 16 ແບບແຜນວິທີເຮັດວຽກ

ແບບແຜນວິທີການເຮັດວຽກ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວ ຕ້ອງປະຕິບັດ ດັ່ງນີ້:

1. ມີແຜນການ, ແຜນງານ ແລະ ແຜນໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ເຄື່ອນໄຫວວຽກງານຕາມພາລະບົດບາດ, ດໍາເນີນກອງປະຊຸມວິຊາການ ປະຈໍາອາທິດ ເພື່ອຄົ້ນຄວ້າບັນຫາທີ່ຈະລາຍງານຕໍ່ກອງປະຊຸມຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນທີ່ຈັດຂຶ້ນ ຢ່າງປົກກະຕິ;
3. ປະຕິບັດລະບອບ ກວດກາ, ຕິດຕາມ-ຄຸ້ມຄອງ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍ, ຮັບປະກັນຜົນປະໂຫຍດສ່ວນລວມ;
4. ປະຕິບັດການພົວພັນ, ປະສານງານ ພາຍໃນ ແລະ ພາຍນອກ.

**ມາດຕາ 17 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ ຫຼື ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງ ປະຕິບັດ ຂໍ້ຕົກລົງສະບັບນີ້ ລວມເຖິງວຽກງານການປະສານງານ, ການດຶງດູດ ແລະ ຊຸກຍູ້ການລົງທຶນ ຈະໄດ້ຮັບ ການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ ໂດຍຜ່ານການສະເໜີ ຂອງ ຫ້ອງການບໍລິການ ການ ລົງທຶນປະຕູດຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ ແລະ ຜ່ານການຕົກລົງ ເຫັນດີເປັນເອກະພາບຂອງຄະນະກຳ ມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

**ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ໄດ້ລະເມີດ, ເມີນເສີຍ ຫຼື ຂັດຂວາງ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ລົງວິໄນ ຫຼື ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

## ໝວດທີ 5

### ບົດບັນຍັດສຸດທ້າຍ

**ມາດຕາ 19 ງົບປະມານ ແລະ ຕາປະທັບ**

ຫ້ອງການບໍລິການການລົງທຶນປະຕູດຽວນຳໃຊ້ຕາປະທັບອັນດຽວກັນກັບຕາປະທັບຂອງກົມສົ່ງ ເສີມການລົງທຶນ ແລະ ນຳໃຊ້ງົບປະມານບໍລິຫານປົກກະຕິ ຂອງ ກະຊວງແຜນການ ແລະ ການ ລົງທຶນ.

ໜ່ວຍງານປະສານງານ ການບໍລິການ ການລົງທຶນປະຕູດຽວ ຂອງຂະແໜງການກ່ຽວຂ້ອງ ນຳໃຊ້ ຕາປະທັບອັນດຽວກັບກົມກອງທີ່ກ່ຽວຂ້ອງຕາມພາລະບົດບາດ ແລະ ນຳໃຊ້ງົບປະມານ ບໍລິຫານປົກກະຕິ ຂອງແຕ່ລະຂະແໜງການ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ຫ້ອງການບໍລິການການລົງທຶນປະຕູດຽວ, ບັນດາກົມວິຊາການ, ພະແນກການຂອງຂະແໜງການ ແລະ ໜ່ວຍງານປະສານງານການລົງທຶນປະຕູດຽວຂອງແຕ່ລະຂະແໜງການກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດ ຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ຕົກລົງ ແລະ ລະບຽບ ການຕ່າງໆ ກ່ອນໜ້ານີ້ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ປະທານ

**ສອນໄຊ ສີພັນດອນ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ 2735/ກຜທ

ນະຄອນຫຼວງວຽງຈັນ, ວັນທີ 02 ພະຈິກ 2018

# ຂໍ້ຕົກລົງ
# ວ່າດ້ວຍ ການວາງເງິນຄ້ຳປະກັນ ສໍາລັບກິດຈະການສໍາປະທານ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14 /ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມສົ່ງເສີມການລົງທຶນ.

## ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດເງື່ອນໄຂ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບ ການວາງເງິນຄ້ຳປະກັນ, ການຖອນເງິນຄ້ຳປະກັນ, ການຍຶດເງິນຄ້ຳປະກັນ ແລະ ການວາງເງິນຄ້ຳປະກັນໃໝ່ ສໍາລັບການລົງທຶນໃນກິດຈະການສໍາປະທານ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເປັນຕົ້ນ ການພັດທະນາທີ່ດິນ, ການພັດທະນາເຂດເສດຖະກິດພິເສດ, ການພັດທະນາເຂດອຸດສາຫະກໍາປຸງແຕ່ງເພື່ອສົ່ງອອກ, ການພັດທະນາແຮ່ທາດ, ການພັດທະນາພະລັງງານ ແລະ ການສໍາປະທານສາຍການບິນ, ໂທລະຄົມມະນາຄົມ ແລະ ກິດຈະການອື່ນ ທີ່ລັດຖະບານກໍານົດໃນບັນຊີກິດຈະການສໍາປະທານ.

### ມາດຕາ 2 ການວາງເງິນຄ້ຳປະກັນ

ການວາງເງິນຄ້ຳປະກັນ ແມ່ນການວາງເງິນມັດຈໍາ ກັບລັດຖະບານ ເພື່ອຄ້ຳປະກັນການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສໍາປະທານ, ກິດຈະການກ່ຽວກັບແຮ່ທາດຕາມໃບອະນຸຍາດລົງທຶນ ແລະ ກິດຈະການອື່ນ ທີ່ລັດຖະບານກໍານົດໃນບັນຊີກິດຈະການສໍາປະທານ.

**ມາດຕາ 3 ກິດຈະການທີ່ຕ້ອງວາງເງິນຄ້ຳປະກັນ**

ກິດຈະການທີ່ຕ້ອງວາງເງິນຄ້ຳປະກັນ ມີ: ກິດຈະການສຳປະທານທີ່ດິນ ເພື່ອການກະສິກຳ ແລະ ການທ່ອງທ່ຽວ, ພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ; ກິດຈະການກ່ຽວກັບແຮ່ທາດ; ການພັດທະນາພະລັງງານ; ການສຳປະທານສາຍການບິນ, ໂທລະຄົມມະນາຄົມ ແລະ ກິດຈະການອື່ນ ທີ່ລັດຖະບານກຳນົດໃນບັນຊີກິດຈະການສຳປະທານ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນໃນກິດຈະການສຳປະທານຈາກລັດຖະບານ (ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ) ຫຼື ອົງການປົກຄອງທ້ອງຖິ່ນ (ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ) ຕາມຂອບເຂດສິດ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ຈຳນວນເງິນຄ້ຳປະກັນ ແລະ ກຳນົດເວລາການວາງເງິນຄ້ຳປະກັນ

**ມາດຕາ 5 ຈຳນວນເງິນຄ້ຳປະກັນ**

ຈຳນວນເງິນຄ້ຳປະກັນ ສຳລັບກິດຈະການສຳປະທານ ແມ່ນຂຶ້ນກັບ ຂະໜາດ, ປະເພດ ແລະ ຂະແໜງການ ດັ່ງນີ້:

**1. ການພັດທະນາທີ່ດິນ.**

ການວາງເງິນຄ້ຳປະກັນ ບົດບັນທຶກຄວາມເຂົ້າໃຈ (MOU) ແລະ ສັນຍາສຳປະທານ (CA) ມີດັ່ງນີ້:

- ເນື້ອທີ່ດິນ ແຕ່ 150 ເຮັກຕາ ລົງມາ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 30.000 ໂດລາສະຫະລັດ;
- ເນື້ອທີ່ດິນ ຫຼາຍກວ່າ 150 ແຕ່ບໍ່ເກີນ 1.000 ເຮັກຕາ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 50.000 ໂດລາສະຫະລັດ;
- ເນື້ອທີ່ດິນ ຫຼາຍກວ່າ 1.000 ເຮັກຕາ ຂຶ້ນໄປ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 70.000 ໂດລາສະຫະລັດ.

**2. ການພັດທະນາແຮ່ທາດ.**

ການວາງເງິນຄ້ຳປະກັນ ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ແລະ ສັນຍາຂຸດຄົ້ນແຮ່ທາດ ມີດັ່ງນີ້:

- ເນື້ອທີ່ສຳປະທານແຮ່ທາດ ແຕ່ 1 ກິໂລຕາແມັດ ລົງມາ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 20.000 ໂດລາສະຫະລັດ;
- ເນື້ອທີ່ສຳປະທານແຮ່ທາດ ຫຼາຍກວ່າ 1 ແຕ່ບໍ່ເກີນ 100 ກິໂລຕາແມັດ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 50.000 ໂດລາສະຫະລັດ;

- ເນື້ອທີ່ສຳປະທານແຮ່ທາດ ຫຼາຍກວ່າ 100 ກິໂລຕາແມັດ ຂຶ້ນໄປ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 100.000 ໂດລາສະຫະລັດ.

ການວາງເງິນຄ້ຳປະກັນ ໃນການຂຸດຄົ້ນແຮ່ທາດອະໂລຫະ ສຳລັບອຸດສາຫະກຳ ໃຫ້ປະຕິບັດ ດັ່ງນີ້:

- ບໍລິມາດຂຸດຄົ້ນ ໜ້ອຍກວ່າ 100.000 ແມັດກ້ອນຕໍ່ປີ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 10.000 ໂດລາສະຫະລັດ;

- ບໍລິມາດຂຸດຄົ້ນ ແຕ່ 100.000 ແມັດກ້ອນຕໍ່ປີ ຂຶ້ນໄປ ວາງເງິນຄ້ຳປະກັນ ຈຳນວນ 30.000 ໂດລາສະຫະລັດ.

**3. ການພັດທະນາພະລັງງານ.**

ການວາງເງິນຄ້ຳປະກັນ ບົດບັນທຶກຄວາມເຂົ້າໃຈ (MOU), ສັນຍາພັດທະນາໂຄງການ (PDA) ມີດັ່ງນີ້:

- ຂະໜາດກຳລັງຕິດຕັ້ງ ແຕ່ 5 ເມກາວັດ ລົງມາ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 30.000 ໂດລາສະຫະລັດ;

- ຂະໜາດກຳລັງຕິດຕັ້ງ ສູງກວ່າ 5 ຫາ 100 ເມກາວັດ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 50.000 ໂດລາສະຫະລັດ;

- ຂະໜາດກຳລັງຕິດຕັ້ງ ສູງກວ່າ 100 ເມກາວັດ ຂຶ້ນໄປ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 100.000 ໂດລາສະຫະລັດ.

ສຳລັບກິດຈະການສຳປະທານປະເພດອື່ນ ທີ່ບໍ່ນອນໃນຂໍ້ 1, ຂໍ້ 2 ແລະ ຂໍ້ 3 ຂອງມາດຕານີ້ ແມ່ນໃຫ້ວາງເງິນຄ້ຳປະກັນ ໃນຈຳນວນ 50.000 ໂດລາສະຫະລັດ.

**ມາດຕາ 6 ໄລຍະການວາງເງິນຄ້ຳປະກັນ**

ໄລຍະການວາງເງິນຄ້ຳປະກັນ ສຳລັບແຕ່ລະປະເພດກິດຈະການສຳປະທານ ປະຕິບັດ ດັ່ງນີ້:

1. ການພັດທະນາທີ່ດິນ ເພື່ອການກະສິກຳ ແລະ ການທ່ອງທ່ຽວ, ການພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ໃຫ້ວາງເງິນຄ້ຳປະກັນ ໃນໄລຍະບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາສຳປະທານ.

ສຳລັບສັນຍາສຳປະທານທີ່ດິນ ເພື່ອການກະສິກຳ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ໃຫ້ວາງເງິນຄ້ຳປະກັນໃນໄລຍະກໍ່ສ້າງໂຮງງານ, ສ່ວນການພັດທະນາເຂດເສດຖະກິດພິເສດ ແລະ ການພັດທະນາແຫຼ່ງທ່ອງທ່ຽວ ແມ່ນໃຫ້ວາງເງິນຄ້ຳປະກັນໃນໄລຍະກໍ່ສ້າງພື້ນຖານໂຄງລ່າງ.

2. ການພັດທະນາແຮ່ທາດ ໃຫ້ວາງເງິນຄ້ຳປະກັນໃນໄລຍະຊອກຄົ້ນ, ສຳຫຼວດ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ຂຸດຄົ້ນແຮ່ທາດ.

ສຳລັບສັນຍາຂຸດຄົ້ນແຮ່ທາດ ແມ່ນໃຫ້ວາງເງິນຄ້ຳປະກັນໃນໄລຍະກໍ່ສ້າງໂຮງງານ.

3. ການພັດທະນາພະລັງງານ ໃຫ້ວາງເງິນຄ້ຳປະກັນໃນໄລຍະບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາພັດທະນາໂຄງການ.

ສຳລັບກິດຈະການສຳປະທານປະເພດອື່ນ ທີ່ບໍ່ນອນໃນຂໍ້ 1, ຂໍ້ 2 ແລະ ຂໍ້ 3 ຂອງມາດຕານີ້ ແມ່ນໃຫ້ວາງເງິນຄ້ຳປະກັນໃນໄລຍະບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການ ຫຼື ໃບອະນຸຍາດລົງທຶນ.

### ມາດຕາ 7 ກຳນົດເວລາການວາງເງິນຄ້ຳປະກັນ

ພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນທີ່ລັດຖະບານ ແລະ ຜູ້ລົງທຶນໄດ້ເຊັນບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໄດ້ຮັບໃບອະນຸຍາດລົງທຶນ, ຜູ້ລົງທຶນຕ້ອງວາງເງິນຄ້ຳປະກັນເປັນເງິນສົດ ດ້ວຍການໂອນເຂົ້າບັນຊີຂອງລັດຖະບານ ຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ ຢູ່ຄັງເງິນແຫ່ງຊາດ ທີ່ເປີດໄວ້ຢູ່ທະນາຄານທຸລະກິດຕາມເລກບັນຊີທີ່ແຈ້ງໂດຍກະຊວງແຜນການ ແລະ ການລົງທຶນ.

## ໝວດທີ 3
## ການສົ່ງຄືນ ແລະ ຜົນສະທ້ອນຂອງການບໍ່ວາງເງິນຄ້ຳປະກັນ

### ມາດຕາ 8 ການສົ່ງເງິນຄ້ຳປະກັນຄືນ

ເງິນຄ້ຳປະກັນການປະຕິບັດ ບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ຈະຖືກສົ່ງຄືນໃຫ້ຜູ້ລົງທຶນ ຕາມເງື່ອນໄຂ ດັ່ງນີ້:

1. ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ (PDA) ແລະ ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ຜູ້ລົງທຶນຕ້ອງສຳເລັດໜ້າວຽກ ທີ່ກຳນົດໄວ້ ແລະ ໄດ້ເຊັນສັນຍາຂັ້ນຕໍ່ໄປ ກັບລັດຖະບານ ຫຼື ຜົນການສຶກສາສຳຫຼວດ ບໍ່ມີຄວາມເປັນໄປໄດ້ທາງດ້ານເສດຖະກິດ ໂດຍໄດ້ຮັບການຢັ້ງຢືນເປັນລາຍລັກອັກສອນ ຈາກກະຊວງການກ່ຽວຂ້ອງຂອງພາກລັດ;

2. ສັນຍາຂຸດຄົ້ນແຮ່ທາດ ແລະ ສັນຍາສຳປະທານທີ່ດິນ ເພື່ອການກະສິກຳ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ຜູ້ລົງທຶນຕ້ອງສຳເລັດການກໍ່ສ້າງໂຮງງານ ຕາມກຳນົດເວລາ;

3. ສັນຍາພັດທະນາເຂດເສດຖະກິດພິເສດ ແລະ ການພັດທະນາແຫຼ່ງທ່ອງທ່ຽວ ຜູ້ລົງທຶນ ຕ້ອງສຳເລັດໜ້າວຽກ ຢ່າງໜ້ອຍ 25% ຂອງແຜນການກໍ່ສ້າງພື້ນຖານໂຄງລ່າງເບື້ອງຕົ້ນ ໂດຍມີການຢັ້ງຢືນຈາກກະຊວງການກ່ຽວຂ້ອງ.

ສຳລັບກິດຈະການສຳປະທານປະເພດອື່ນ ທີ່ບໍ່ນອນໃນຂໍ້ 1, ຂໍ້ 2 ແລະ ຂໍ້ 3 ຂອງມາດຕານີ້ ແມ່ນໃຫ້ປະຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາໂຄງການ.

### ມາດຕາ 9 ຜົນສະທ້ອນຂອງການບໍ່ວາງເງິນຄ້ຳປະກັນ

ໃນກໍລະນີ ຜູ້ລົງທຶນຫາກບໍ່ປະຕິບັດພັນທະ ແລະ ເງື່ອນໄຂ ໃນການວາງເງິນຄ້ຳປະກັນ ຕາມທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນ ແລະ ຂໍ້ຕົກລົງສະບັບນີ້ ກະຊວງແຜນການ ແລະ ການລົງທຶນ ຕ້ອງດຳເນີນການລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ເພື່ອຍົກເລີກບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນ.

## ໝວດທີ 4
## ການຍຶດ ແລະ ວາງເງິນຄ້ຳປະກັນໃໝ່

### ມາດຕາ 10 ການຍຶດເງິນຄ້ຳປະກັນ

ເງິນຄ້ຳປະກັນ ບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ຈະຖືກຍຶດ ແລະ ມອບເຂົ້າງົບປະມານຂອງລັດ ດ້ວຍສາເຫດ ດັ່ງນີ້:

1. ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ (PDA) ແລະ ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ໝົດອາຍຸ ແຕ່ຜູ້ລົງທຶນບໍ່ສຳເລັດໜ້າວຽກ ຕາມທີ່ກຳນົດໄວ້ ແລະ ບໍ່ສາມາດເຊັນສັນຍາໃນຂັ້ນຕໍ່ໄປ ກັບລັດຖະບານ;

2. ສັນຍາຂຸດຄົ້ນແຮ່ທາດ ແລະ ສັນຍາສຳປະທານທີ່ດິນ ເພື່ອການກະສິກຳ ແລະ ເຂດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ຜູ້ລົງທຶນບໍ່ສຳເລັດການກໍ່ສ້າງໂຮງງານ ຕາມກຳນົດເວລາ;

3. ສັນຍາພັດທະນາເຂດເສດຖະກິດພິເສດ ແລະ ການພັດທະນາແຫຼ່ງທ່ອງທ່ຽວ ຜູ້ລົງທຶນສຳເລັດໜ້າວຽກບໍ່ເຖິງ 25% ຂອງແຜນການກໍ່ສ້າງພື້ນຖານໂຄງລ່າງເບື້ອງຕົ້ນ ຕາມກຳນົດເວລາ ໂດຍມີການຢັ້ງຢືນຈາກຂະແໜງການກ່ຽວຂ້ອງ;

4. ບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ຖືກຍົກເລີກ ຍ້ອນຄວາມບົກຜ່ອງຂອງຜູ້ລົງທຶນ.

ສຳລັບກິດຈະການສຳປະທານປະເພດອື່ນ ທີ່ບໍ່ນອນໃນຂໍ້ 1, ຂໍ້ 2 ແລະ ຂໍ້ 3 ຂອງມາດຕານີ້ ແມ່ນໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາໂຄງການ.

### ມາດຕາ 11 ການວາງເງິນຄ້ຳປະກັນໃໝ່

ໃນກໍລະນີ ຜູ້ລົງທຶນມີການສະເໜີຂໍຕໍ່ອາຍຸບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ຜູ້ລົງທຶນຕ້ອງວາງເງິນຄ້ຳປະກັນໃໝ່ໃນຈຳນວນເທົ່າເດີມພາຍໃນກຳນົດເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບໜັງສືແຈ້ງໃຫ້ວາງເງິນຄ້ຳປະກັນໃໝ່. ກໍລະນີມີການປ່ຽນແປງເນື້ອທີ່ດິນ ຫຼື ຂະໜາດກຳລັງຕິດຕັ້ງໄຟຟ້າ ຈຳນວນເງິນຄ້ຳປະກັນທີ່ຈະວາງໃໝ່ ກໍໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້. ຖ້າຜູ້ລົງທຶນບໍ່ປະຕິບັດການວາງເງິນຄ້ຳປະກັນໃໝ່ຕາມກຳນົດເວລາ, ຂະແໜງແຜນການ ແລະ ການລົງທຶນ ຈະບໍ່ອອກໜັງສືແຈ້ງຕໍ່ອາຍຸບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ແລະ ຖືວ່າອາຍຸຂອງບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດນັ້ນ ສິ້ນສຸດລົງ ຕາມກົດໝາຍ.

ໃນກໍລະນີມີການສະເໜີຂໍຕໍ່ອາຍຸບົດບັນທຶກຄວາມເຂົ້າໃຈ, ສັນຍາໂຄງການສຳປະທານ ຫຼື ໃບອະນຸຍາດລົງທຶນສຳລັບກິດຈະການກ່ຽວກັບແຮ່ທາດ ຍ້ອນບໍ່ແມ່ນຄວາມບົກຜ່ອງຂອງຜູ້ລົງທຶນ ໂດຍມີຫຼັກຖານຢັ້ງຢືນ ໃຫ້ນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕາມແຕ່ລະກໍລະນີ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 12 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມສົ່ງເສີມການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 13 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ປອ ສຸພັນ ແກ້ວມີໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເລກທີ 001/ຄລທ.

ນະຄອນຫຼວງວຽງຈັນ, ວັນທີ 08 ມິຖຸນາ 2018

# ຄຳແນະນຳ
# ກ່ຽວກັບການນຳໃຊ້ຕາປະທັບ ຂອງຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018;
- ອີງຕາມ ບົດລາຍງານ ຂອງກະຊວງແຜນການ ແລະ ການລົງທຶນ ເລກທີ 1274/ກຜທ, ລົງວັນທີ 06 ມິຖຸນາ 2018.

**ປະທານອອກຄຳແນະນຳ:**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ວາງອອກ ເພື່ອເຮັດໃຫ້ການນຳໃຊ້ຕາປະທັບໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ (ຄລທ.ສ) ແລະ ຂັ້ນແຂວງ (ຄລທ.ຂ), ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານສົ່ງເສີມການລົງທຶນ ຕາມຂອບເຂດສິດ ຄວາມຮັບຜິດຊອບຂອງຕົນ ຕາມລະບຽບ ແລະ ກົດໝາຍ.

## II. ເນື້ອໃນ.

ກ. ການນຳໃຊ້ຕາປະທັບ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ດັ່ງນີ້:

1. ນຳໃຊ້ ເຂົ້າໃນບັນດາຂໍ້ຕົກລົງ ທີ່ແຕ່ງຕັ້ງ ແລະ ຮັບຮອງ ໂດຍຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການການລົງທຶນ ຂັ້ນສູນກາງ;
2. ນຳໃຊ້ ເຂົ້າໃນການອອກຂໍ້ຕົກລົງແຈ້ງການ; ຄຳແນະນຳ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ;

3. ນຳໃຊ້ ການອອກຄູ່ມືແນະນຳ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ;

4. ນຳໃຊ້ ເຂົ້າໃນປຶ້ມບັນທຶກກອງປະຊຸມ ຄລທ.ສ;

5. ນຳໃຊ້ ການອອກໃບອະນຸຍາດລົງທຶນ ໂດຍການມອບໃຫ້ ທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ ທັງເປັນຜູ້ປະຈຳການ ຂອງ ຄລທ.ສ ເປັນຜູ້ເຊັນໃບອະນຸຍາດລົງທຶນ, ແຕ່ໃນກໍລະນີ ຮອງປະທານ ຄລທ.ສ ຜູ້ປະຈຳການບໍ່ຢູ່ ແມ່ນມອບໃຫ້ທ່ານ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ປະຈຳການເຊັນແທນ;

6. ຕາປະທັບ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແມ່ນເກັບຮັກສາໄວ້ຢູ່ ກົມສົ່ງເສີມການລົງທຶນ;

ຂ. ການນຳໃຊ້ຕາປະທັບ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ດັ່ງນີ້:

1. ນຳໃຊ້ ເຂົ້າໃນບັນດາຂໍ້ຕົກລົງ ທີ່ແຕ່ງຕັ້ງ ແລະ ຮັບຮອງ ໂດຍຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ;

2. ນຳໃຊ້ ເຂົ້າໃນການອອກຂໍ້ຕົກລົງແຈ້ງການ; ຄຳແນະນຳ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການການລົງທຶນ ຂັ້ນແຂວງ;

3. ນຳໃຊ້ເຂົ້າໃນປຶ້ມບັນທຶກກອງປະຊຸມ ຄລທ.ຂ;

4. ນຳໃຊ້ ການອອກໃບອະນຸຍາດລົງທຶນ ຂັ້ນແຂວງ;

5. ຕາປະທັບ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ແມ່ນເກັບຮັກສາໄວ້ຢູ່ ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ;

## III. ການຈັດຕັ້ງປະຕິບັດ.

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ແຂວງ ຈັດຕັ້ງ ແລະ ປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

## IV. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານ**




**ສອນໄຊ ສີພັນດອນ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ
ຂັ້ນສູນກາງ                                                                 ເລກທີ 01/ຄລທ.ສ

ນະຄອນຫຼວງວຽງຈັນ, ລົງວັນທີ 02/01/2019

# ບົດແນະນຳ
## ວ່າດ້ວຍ ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບ ແຜນນຳເຂົ້າ ຂອງວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ກົດໝາຍວ່າດ້ວຍ ພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງ ລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດຢູ່ ສປປ ລາວ;
- ອີງຕາມ ບົດບັນທຶກການມອບ-ຮັບວຽກງານການຈັດຕັ້ງປະຕິບັດນະໂຍບາຍດ້ານພາສີ ແລະ ອາກອນ ໃຫ້ ແກ່ບັນດາວິສາຫະກິດລົງທຶນພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ລະຫວ່າງ ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ສະບັບລົງວັນທີ 18 ທັນວາ 2017;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 3081/ກຜທ.ລທ2, ລົງ ວັນທີ 10 ທັນວາ 2018.

## ປະທານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ
## ອອກບົດແນະນຳ ດັ່ງນີ້:

### 1. ຈຸດປະສົງ

ຈຸດປະສົງຂອງບົດແນະນຳສະບັບນີ້ ແມ່ນເພື່ອຈັດຕັ້ງຜັນຂະຫຍາຍບາງມາດຕາ ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ຜັນຂະຫຍາຍຄຳສັ່ງຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ກ່ຽວກັບການປັບປຸງ ລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດຢູ່ ສປປ ລາວ, ເພື່ອແນໃສ່ແກ້ໄຂຄວາມ ຫຍຸ້ງຍາກ ທີ່ພົວພັນກັບຕົວຊີ້ວັດຄວາມສະດວກຂອງການດຳເນີນທຸລະກິດ ຢູ່ ສປປ ລາວ ແລະ ເຮັດໃຫ້

ການຈັດຕັ້ງປະຕິບັດ ການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ, ຖືກຕ້ອງຕາມຂັ້ນຕອນ ແລະ ວິທີການດຳເນີນງານໃນການອະນຸມັດຮັບຮອງແຜນນຳເຂົ້າ ເພື່ອມາຮັບໃຊ້ວຽກງານກິດຈະການລົງທຶນ ແລະ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກແກ່ຜູ້ລົງທຶນຢູ່ ສປປ ລາວ.

## 2. ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ

ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ ໝາຍເຖິງ ການໃຫ້ນະໂຍບາຍດ້ວຍການກຳນົດລາຍການສິນຄ້າທີ່ຈະນຳເຂົ້າຖາວອນ ແລະ ຊົ່ວຄາວ ທີ່ກຳນົດໃນແຜນນຳເຂົ້າ (Master List) ເພື່ອມາຮັບໃຊ້ວຽກງານການຜະລິດ ແລະ ພັດທະນາກິດຈະການລົງທຶນຂອງບັນດາວິສາຫະກິດທີ່ນອນໃນກິດຈະການສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກິດຈະການລົງທຶນ ທີ່ມີສັນຍາກັບລັດຖະບານ.

## 3. ການອະທິບາຍຄຳສັບ

- **ວັດຖຸດິບ** ໝາຍເຖິງ ວັດຖຸທີ່ໄດ້ມາຈາກຊັບພະຍາກອນແຮ່ທາດທຳມະຊາດ (ເຊັ່ນ: ໂລຫະ, ອະໂລຫະ), ມາຈາກແຫຼ່ງກະສິກຳ ແລະ ປ່າໄມ້ (ເຊັ່ນ: ພືດ ແລະ ສັດລ້ຽງປະເພດຕ່າງໆ), ມາຈາກແຫຼ່ງການຜະລິດຢູ່ຕ່າງປະເທດ (ເຊັ່ນ: ຜະລິດຕະພັນເຄິ່ງສຳເລັດຮູບ) ແລະ ມາຈາກສິ່ງເສດເຫຼືອ (ເຊັ່ນ: ເສດເຈ້ຍ, ເສດໄມ້, ເສດເຫຼັກ, ເສດຢາງປລາສະຕິກ) ຍົກເວັ້ນ ສິ່ງເສດເຫຼືອທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ;
- **ຊິ້ນສ່ວນປະກອບ** ໝາຍເຖິງ ວັດຖຸໃດໜຶ່ງທີ່ນຳໃຊ້ເປັນສ່ວນປະກອບ ໃນການຜະລິດໃຫ້ກາຍເປັນຜະລິດຕະພັນສຳເລັດຮູບອື່ນ;
- **ວັດຖຸປະກອບ** ໝາຍເຖິງ ຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ທີ່ນຳໃຊ້ເຂົ້າໃນການຜະລິດ ຫຼື ປະກອບເປັນຜະລິດຕະພັນສຳເລັດຮູບອື່ນ;
- **ອາໄຫຼ່** ໝາຍເຖິງ ວັດຖຸໃຊ້ສຳລັບປ່ຽນຖ່າຍໃນເຄື່ອງຈັກ, ອຸປະກອນ ແລະ ເຄື່ອງມືຕ່າງໆ;
- **ເຄື່ອງຈັກ** ໝາຍເຖິງ ສິ່ງທີ່ປະກອບດ້ວຍຫຼາຍຊິ້ນສ່ວນ ທີ່ນຳໃຊ້ເພື່ອການຜະລິດ, ນຳສົ່ງພະລັງງານ, ປ່ຽນ ຫຼື ສັບປ່ຽນທີ່ ຂອງພະລັງງານໃດໜຶ່ງ ເປັນພະລັງງານອື່ນ ເພື່ອສ້າງເປັນຊັບສົມບັດຄົງທີ່ຂອງວິສາຫະກິດ;
- **ພາຫະນະກົນຈັກຮັບໃຊ້ການຜະລິດທາງກົງ** ໝາຍເຖິງ ຍານພາຫະນະກົນຈັກທີ່ຮັບໃຊ້ກໍ່ສ້າງ, ການຂຸດຄົ້ນບໍ່ແຮ່, ການຍົກຍໍ ແລະ ປ່ຽນຖ່າຍ, ການບົດໂມ້, ການຜະລິດເບຕົງ, ການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ, ການບໍລິການສາທາລະນະ ເປັນຕົ້ນ ລົດບັດ 25 ບ່ອນນັ່ງຂຶ້ນໄປ ສຳລັບວຽກງານຂົນສົ່ງ ແລະ ທ່ອງທ່ຽວ, ການອະນາໄມຕົວເມືອງ, ອຸດສາຫະກຳການຂົນສົ່ງສະເພາະ ເປັນຕົ້ນ ປະເພດຫົວລາກ-ຫາງລາກ, ລົດນ້ຳ, ລົດຕູ້ແຊ່ເຢັນ ແລະ ລົດຂົນສົ່ງວັດຖຸອັນຕະລາຍ (ລົດບັນທຸກນ້ຳມັນ, ລົດອາຍແກັສ, ລົດຂົນສົ່ງສານເຄມີ) ແລະ ລົດອື່ນທີ່ຄ້າຍຄຽງ, ລົດຕັກ, ລົດຈົກ-ຕັກ, ລົດກວາດ, ລົດດູດ ລົດເຄຣນ, ລົດໂລ, ລົດຍົກຍໍ (ຟອກລິບ);
- **ຊັບສົມບັດຄົງທີ່** ໝາຍເຖິງ ຊັບສິນຂອງບໍລິສັດ ທີ່ຖືກບັນຈຸເຂົ້າໃນບັນຊີຊັບສິນຄົງທີ່ ແລະ ຕ້ອງຖືກຫັກຄ່າຫຼຸ້ຍຫ້ຽນແຕ່ລະປີຕາມກົດໝາຍ.

## 4. ຂອບເຂດການນຳໃຊ້

ບົດແນະນຳສະບັບນີ້ ນຳໃຊ້ສຳລັບ ວິສາຫະກິດພາກເອກະຊົນ ຢູ່ ສປປ ລາວ ທີ່ມອບໃນກິດຈະການສົ່ງເສີມການລົງທຶນ ທີ່ໄດ້ຮັບອະນຸຍາດລົງທຶນຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບກ່ອນ ຫຼື ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.

## 5. ຮູບແບບຂອງການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ

### 5.1 ແຜນນຳເຂົ້າປະຈຳປີ

ການສ້າງແຜນນຳເຂົ້າປະຈຳປີ ແມ່ນຄວາມຮັບຜິດຊອບຂອງວິສາຫະກິດ ແລະ ໂຄງການຕ່າງໆ ເພື່ອນຳສະເໜີແຜນນຳເຂົ້າປະຈຳປີ ໂດຍສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ, ຕາມແບບແຜນຜັງ (Devise), ໃບຄິດໄລ່ບໍລິມາດວຽກຄວາມຕ້ອງການຕົວຈິງ ທີ່ມີການຮັບຮອງເປັນທາງການຈາກຂະແໜງການກ່ຽວຂ້ອງ ແລະ ຖືກຕ້ອງຕາມກົດໝາຍ.

ແຜນນຳເຂົ້າປະຈຳປີ ມີອາຍຸການນຳໃຊ້ ພາຍໃນ 01 ປີ ນັບແຕ່ມື້ລົງລາຍເຊັນຮັບຮອງແຜນນຳເຂົ້າເປັນຕົ້ນໄປ. ພາຍຫຼັງໝົດອາຍຸການນຳໃຊ້ ບັນດາສິນຄ້າທີ່ກຳນົດໃນແຜນນຳເຂົ້າ ຊຶ່ງຍັງບໍ່ທັນນຳເຂົ້າຕ້ອງຖືກລຶບລ້າງໃນທັນທີ.

### 5.2 ແຜນນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ

ແຜນນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ ແມ່ນແຜນນຳເຂົ້າ ທີ່ມີຄວາມຈຳເປັນຕ້ອງການນຳເຂົ້າເພີ່ມເຕີ່ມ ຫຼື ສຸກເສີນ ເພື່ອມາຮັບໃຊ້ວຽກງານການຜະລິດຂອງວິສາຫະກິດ ຊຶ່ງມີມູນຄ່າ ແລະ ບໍລິມາດຕາມຄວາມຕ້ອງການເພີ່ມເຕີມຕົວຈິງຂອງວິສາຫະກິດ.

ແຜນນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ ມີອາຍຸການນຳໃຊ້ຕາມກຳນົດເວລາຂອງແຜນນຳເຂົ້າປະຈຳປີ ທີ່ໄດ້ຖືກຮັບຮອງ.

ໃນໄລຍະທີ່ຍັງດຳເນີນຂັ້ນຕອນສະເໜີຂໍແຜນນຳເຂົ້າປະຈຳປີ, ບໍ່ທັນໄດ້ຖືກຮັບຮອງ ແຕ່ວິສາຫະກິດຫາກມີຄວາມຈຳເປັນຕ້ອງການນຳເຂົ້າວັດຖຸດິບ ເພື່ອມາທຳການຜະລິດ ແມ່ນຕ້ອງໄດ້ຮັບການຢັ້ງຢືນຂໍ້ມູນຕາມແຜນນຳເຂົ້າປະຈຳປີ ຈາກຂະແໜງແຜນການ ແລະ ການລົງທຶນ, ເພື່ອນຳໄປຂໍຄ້ຳປະກັນເອົາສິນຄ້າອອກຈາກສາງ ຫຼື ດ່ານ ກ່ອນການແຈ້ງພາສີເປັນລາຍລະອຽດ ຕາມກົດໝາຍວ່າດ້ວຍພາສີ; ພາຍຫຼັງທີ່ມີການຮັບຮອງແຜນນຳເຂົ້າປະຈຳປີແລ້ວ ຈຶ່ງນຳໄປສະສາງການຄ້ຳປະກັນ ຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການ ຢ່າງເຂັ້ມງວດ.

## 6. ປະເພດຂອງການໃຫ້ນະໂຍບາຍ ດ້ານພາສີ ແລະ ອາກອນມູນຄ່າເພີ່ມ

### 6.1 ນະໂຍບາຍ ງົດເກັບພາສີ ແລະ ພັນທະອື່ນ:

- ການນຳເຂົ້າ ວັດຖຸດິບ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ແລະ ເຄື່ອງຈັກ ຮັບໃຊ້ເພື່ອການຜະລິດແລ້ວສົ່ງອອກ 100%.

### 6.2 ນະໂຍບາຍຍົກເວັ້ນພາສີ ແລະ ເສຍອາກອນມູນຄ່າເພີ່ມ ໃນອັດຕາ 0%:

- ການນຳເຂົ້າ ວັດສະດຸກໍ່ສ້າງ ແລະ ອຸປະກອນ ທີ່ບໍ່ມີຢູ່ພາຍໃນປະເທດ ຫຼື ບໍ່ສາມາດຈັດຊື້ໄດ້ພາຍໃນປະເທດ ຫຼື ມີແຕ່ບໍ່ພຽງພໍກັບຄວາມຕ້ອງການ ແມ່ນຈະໄດ້ຮັບອະນຸຍາດໄດ້ພຽງຄັ້ງດຽວ ໂດຍອີງໃສ່ໄລຍະເວລາໃນການກໍ່ສ້າງ ເພື່ອການກໍ່ສ້າງໂຮງງານ, ຕຶກອາຄານ ແລະ ສິ່ງປຸກສ້າງທີ່ເປັນຊັບສິນບັດ

ຄົງທີ່ຂອງວິສາຫະກິດເທົ່ານັ້ນ ໂດຍອີງໃສ່ແບບ, ແຜນຜັງ, ໃບຄິດໄລ່ບໍລິມາດວຽກຂອງການກໍ່ສ້າງ ທີ່ຮັບຮອງຈາກຂະແໜງໂຍທາທິການ ແລະ ຂົນສົ່ງ;

- ການນໍາເຂົ້າວັດຖຸດິບ, ວັດຖຸປະກອບ, ຊິ້ນສ່ວນປະກອບ ແລະ ເຄື່ອງຈັກ ທີ່ບໍ່ສາມາດສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອຮັບໃຊ້ການຜະລິດໂດຍກົງ; ສ່ວນການນໍາເຂົ້າ ອຸປະກອນ ທີ່ບໍ່ຮັບໃຊ້ການຜະລິດໂດຍກົງ ແລະ ອາໄຫຼ່ເພື່ອມາປ່ຽນແທນ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ;
- ການນໍາເຂົ້າ ພາຫະນະກົນຈັກຮັບໃຊ້ການຜະລິດທາງກົງ ເພື່ອເປັນຊັບສິນບັດຄົງທີ່;

ສໍາລັບ ລົດບັດ (Bus) ທີ່ຮັບໃຊ້ວຽກງານບໍລິການ ທ່ອງທ່ຽວ ແລະ ຂົນສົ່ງ ຕ້ອງແມ່ນລົດໃໝ່ ສະພາບ 100%. ແຕ່ສໍາລັບ ພາຫະນະກົນຈັກໜັກ ແມ່ນລົດໃໝ່ ຫຼື ລົດທີ່ນໍາໃຊ້ແລ້ວ ຕ້ອງມີອາຍຸການນໍາໃຊ້ ບໍ່ເກີນ 8 ປີ ຫຼື ຊົ່ວໂມງນໍາໃຊ້ມາແລ້ວ ບໍ່ໃຫ້ເກີນ 20.000 ຊົ່ວໂມງ. ພາຫະນະ ທີ່ໄດ້ຮັບນະໂຍບາຍນໍາເຂົ້າຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຕ້ອງໄດ້ນໍາໃຊ້ເຂົ້າໃນວິສາຫະກິດ ຢ່າງຕໍ່າສຸດ 5 ປີ ຈຶ່ງສາມາດໃຫ້ມີການນໍາເຂົ້າມາທົດແທນ ຫຼື ໂອນກໍາມະສິດ, ແຕ່ກ່ອນຈະນໍາເຂົ້າມາທົດແທນ ຫຼື ໂອນກໍາມະ ສິດໄດ້ ພາຫະນະຄັນເກົ່າ ຕ້ອງໄດ້ເສຍພາສີ ແລະ ອາກອນ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ສ່ວນການນໍາເຂົ້າ ນໍ້າມັນເຊື້ອໄຟ, ອາຍແກັສ, ນໍ້າມັນຫຼໍ່ລື່ນ, ລົດຈິບ, ລົດເກັງ, ລົດກະບະ, ລົດຕູ້ 25 ບ່ອນນັ່ງລົງມາ ແລະ ລົດຈັກ ແມ່ນຈະບໍ່ໄດ້ຮັບນະໂຍບາຍສົ່ງເສີມ ແລະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສໍາລັບ ຜະລິດຕະພັນ ທີ່ພາຍໃນສາມາດຜະລິດໄດ້ ໃຫ້ນໍາໃຊ້ຜະລິດຕະພັນພາຍໃນ, ຖ້າວິສາຫະກິດຕ້ອງການນໍາເຂົ້າ ແມ່ນຈະບໍ່ໄດ້ຮັບນະໂຍບາຍສົ່ງເສີມ ແລະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ກໍລະນີ ຜະລິດຕະພັນທີ່ພາຍໃນຜະລິດໄດ້ ແຕ່ບໍ່ໄດ້ມາດຕະຖານ ເຕັກນິກການກໍ່ສ້າງ ຫຼື ການຜະລິດໄດ້ນັ້ນ ແມ່ນໃຫ້ພິຈາລະນາ ແລະ ໃຫ້ນໍາສະເໜີຂໍອະນຸມັດຈາກ ກອງປະຊຸມຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຕາມແຕ່ລະກໍລະນີ.

### 6.3 ນະໂຍບາຍ ການນໍາເຂົ້າຊົ່ວຄາວ

ວິສາຫະກິດພາຍໃນ ແລະ ຕ່າງປະເທດ ທີ່ມີສັນຍາກັບລັດຖະບານ ເຊັ່ນ: ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ, ສັນຍາສໍາປະທານ, ສັນຍາສໍາຫຼວດ ແລະ ສັນຍາຂຸດຄົ້ນ ສາມາດສ້າງແຜນ ນໍາເຂົ້າຊົ່ວຄາວ, ການຕໍ່ການນໍາເຂົ້າຊົ່ວຄາວ ຈາກຂະແໜງແຜນການ ແລະ ການລົງທຶນ, ສໍາລັບ ວັດຖຸປະກອນ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດທາງກົງ ທີ່ມີອາຍຸການໃຊ້ງານຍາວນານ ເພື່ອປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການ.

## 7. ເງື່ອນໄຂການໃຫ້ນະໂຍບາຍ ດ້ານພາສີ ແລະ ອາກອນມູນຄ່າເພີ່ມ

ວິສາຫະກິດ ທີ່ລົງທຶນຢູ່ ສປປ ລາວ ທີ່ມີຈຸດປະສົງສະເໜີຂໍນະໂຍບາຍ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງເປັນນິຕິບຸກຄົນ;
2. ວິສາຫະກິດນັ້ນ ຕ້ອງນອນໃນກິດຈະການສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
3. ຕ້ອງມີການລົງທຶນຢ່າງໜ້ອຍ 1,2 ຕື້ກີບ ຫຼື ມີການນໍາໃຊ້ວິຊາການລາວ ແຕ່ 30 ຄົນ ຫຼື ມີການນໍາໃຊ້ແຮງງານລາວ ທີ່ມີສັນຍາແຮງງານ ຢ່າງຕໍ່າ 1 ປີ ແຕ່ 50 ຄົນຂຶ້ນໄປ;

4. ຕ້ອງດຳເນີນທຸລະກິດປົກກະຕິ ແລະ ປະຕິບັດພັນທະພາສີ-ອາກອນ ຕາມກົດໝາຍ ແລະ ລະບຽບການ ໂດຍມີໃບຢັ້ງຢືນການເສຍພັນທະອາກອນປະຈຳປີ.

## 8. ການສະເໜີຂໍນະໂຍບາຍແຜນນຳເຂົ້າ ແລະ ການແບ່ງຂັ້ນພິຈາລະນາ

ວິສາຫະກິດທີ່ຂັ້ນສູນກາງ ເປັນຜູ້ອະນຸມັດການລົງທຶນ, ການສະເໜີຂໍຮັບຮອງແຜນນຳເຂົ້າ ແມ່ນໃຫ້ສະເໜີຕໍ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ (ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ) ເພື່ອຄົ້ນຄວ້າຮ່ວມກັບຂະແໜງການກ່ຽວຂ້ອງ. ພາຍຫຼັງທີ່ມີການເອກະພາບເຫັນດີແລ້ວ ສະເໜີຕໍ່ ທ່ານຫົວໜ້າຫ້ອງການ, ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ເຊັນໃບຮັບຮອງແຜນນຳເຂົ້າ. ສ່ວນໂຄງການໃຫຍ່ ທີ່ມີສັນຍາສຳປະທານກັບລັດຖະບານ ແລະ ມີມະຕິຮັບຮອງຈາກສະພາແຫ່ງຊາດ ທີ່ມີມູນຄ່າການລົງທຶນ 1 ຕື້ ໂດລາສະຫະລັດ ຂຶ້ນໄປ ແມ່ນລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ເຊັນໃບຮັບຮອງແຜນນຳເຂົ້າ, ແລ້ວສົ່ງຕໍ່ໃຫ້ ກົມພາສີ, ກະຊວງການເງິນ ເພື່ອແຈ້ງໃຫ້ບັນດາດ່ານສາກົນ ທີ່ໂຄງການຈະນຳສິນຄ້າຜ່ານ ຕາມລຳດັບ.

ວິສາຫະກິດທີ່ຂັ້ນແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ອະນຸມັດການລົງທຶນ, ການສະເໜີຂໍຮັບຮອງແຜນນຳເຂົ້າປະຈຳປີແມ່ນໃຫ້ສະເໜີຕໍ່ ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງວຽງຈັນ (ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ, ນະຄອນຫຼວງວຽງຈັນ) ເພື່ອຄົ້ນຄວ້າຮ່ວມກັບຂະແໜງການກ່ຽວຂ້ອງ. ພາຍຫຼັງທີ່ມີການເອກະພາບເຫັນດີແລ້ວ ສະເໜີຕໍ່ ຫົວໜ້າ ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ເຊັນໃບຮັບຮອງແຜນນຳເຂົ້າ, ແລ້ວສົ່ງຕໍ່ໃຫ້ ພະແນກການເງິນແຂວງ, ນະຄອນຫຼວງວຽງຈັນ ເພື່ອແຈ້ງໃຫ້ບັນດາດ່ານສາກົນ ທີ່ໂຄງການຈະນຳສິນຄ້າຜ່ານ ຕາມລຳດັບ. ກໍລະນີທີ່ບໍລິສັດ ຂໍນະໂຍບາຍແຜນນຳເຂົ້າຢູ່ແຂວງບ່ອນໂຄງການຕັ້ງຢູ່ ແຕ່ເວລາຈະນຳເຂົ້າສິນຄ້າຜ່ານດ່ານ ຢູ່ອີກແຂວງໜຶ່ງ ແມ່ນໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ຂອງໂຄງການທີ່ຕັ້ງຢູ່ ສົມທົບກັບພະແນກການເງິນແຂວງ ຂອງດ່ານທີ່ຈະນຳເຂົ້າ ເພື່ອອຳນວຍຄວາມສະດວກໃຫ້ແກ່ບໍລິສັດ. ພ້ອມດຽວກັນນັ້ນໃຫ້ພະແນກການເງິນແຂວງ ນຳສົ່ງເອກະສານ ມາຍັງສູນກາງ (ກົມພາສີ) ເພື່ອສາມາດຕິດຕາມໄດ້.

ສຳລັບ ໂຄງການໄຟຟ້າ ແລະ ບໍ່ແຮ່ ທີ່ມີສັນຍາສຳປະທານກັບລັດຖະບານ ແມ່ນໃຫ້ຍື່ນສະເໜີຕໍ່ຂະແໜງພະລັງງານ ແລະ ບໍ່ແຮ່ ເພື່ອຈັດກອງປະຊຸມຜ່ານແຜນນຳເຂົ້າ ຊຶ່ງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງແລ້ວເຮັດສະໂໜດນຳສົ່ງແຜນນຳເຂົ້າດັ່ງກ່າວ ໃຫ້ຂະແໜງແຜນການ ແລະ ການລົງທຶນ ເພື່ອອະນຸມັດຮັບຮອງແຜນນຳເຂົ້າດັ່ງກ່າວ. ສຳລັບໂຄງການໄຟຟ້າຂະໜາດນ້ອຍທີ່ຂັ້ນແຂວງ ອະນຸມັດການລົງທຶນແມ່ນຍື່ນຕໍ່ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ເປັນຜູ້ຄົ້ນຄວ້າ ແລະ ຈັດກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ແລ້ວເຮັດສະໂໜດນຳສົ່ງແຜນນຳເຂົ້າ ໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ເປັນຜູ້ເຊັນໃບຮັບຮອງແຜນນຳເຂົ້າ.

ສຳລັບ ວິສາຫະກິດໂຮງງານຕັດຫຍິບ, ລະບົບໂຮງງານການຜະລິດ ທີ່ທຳການຜະລິດປຸງແຕ່ງເພື່ອສົ່ງອອກຕ່າງປະເທດ, ທີ່ຈະມີການຢັ້ງຢືນແຫຼ່ງກຳເນີດສິນຄ້າ (Certificate of Origin ຫຼື CO), ພາຍຫຼັງທີ່ຂະແໜງອຸດສາຫະກຳ ແລະ ການຄ້າ ຮັບຮອງແຜນຄວາມຕ້ອງການປະຈຳປີແລ້ວ ແມ່ນໃຫ້ນຳສະເໜີຕໍ່ຂະແໜງການເງິນ (ພາສີ) ເປັນຜູ້ຄຸ້ມຄອງການນຳເຂົ້າຕົວຈິງ ຕາມລະບຽບການ. ສ່ວນລະບົບໂຮງງານທີ່ທຳການຜະລິດປຸງແຕ່ງເພື່ອຈຳໜ່າຍພາຍໃນ, ພາຍຫຼັງທີ່ຂະແໜງອຸດສາຫະກຳ ແລະ ການຄ້າ, ຄົ້ນຄວ້າແຜນການປະຈຳປີ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ແລ້ວນຳສົ່ງແຜນການປະຈຳປີ ໃຫ້ຂະແໜງແຜນການ ແລະ

ການລົງທຶນ ເພື່ອອະນຸມັດຮັບຮອງແຜນນຳເຂົ້າປະຈຳປີ ຕາມກົດໝາຍ ແລະ ລະບຽບການ.

## 9. ການປະກອບເອກະສານ ຂໍນະໂຍບາຍ ແຜນນຳເຂົ້າ

ການຂໍນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ຕ້ອງປະກອບມີບັນດາເອກະສານ ດັ່ງນີ້:

1. ໃບສະເໜີຂໍນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບ ແຜນນຳເຂົ້າ ຂອງບໍລິສັດ;
2. ໃບມອບສິດ ໃຫ້ຜູ້ດຳເນີນແລ່ນເອກະສານ ໂດຍການຢັ້ງຢືນ ແລະ ຮັບຮອງຈາກຜູ້ອຳນວຍການຂອງວິສາຫະກິດນັ້ນ;
3. ບົດລາຍງານສະພາບການດຳເນີນທຸລະກິດໂດຍຫຍໍ້ ໂດຍປະກອບມີເນື້ອໃນດ້ານການນຳເຂົ້າຕົວຈິງຂອງປີຜ່ານມາ, ດ້ານແຮງງານ ແລະ ອື່ນໆ;
4. ຮ່າງແຜນນຳເຂົ້າປະຈຳປີ (ຕາມແບບພິມ/ຕາຕະລາງ ທີ່ ຂະແໜງການແຜນການ ແລະ ການລົງທຶນກຳນົດ) ແລະ ແບບ Soft File;
5. ສຳເນົາ ໃບອະນຸຍາດລົງທຶນ (ຖ້າມີ), ໃບທະບຽນວິສາຫະກິດ; ໃບອະນຸຍາດດຳເນີນກິດຈະການຈາກຂະແໜງການກ່ຽວຂ້ອງ; ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ ໃນປີຜ່ານມາ, ສັນຍາທີ່ເຊັນກັບລັດຖະບານ (ໃນກໍລະນີ ໂຄງການລົງທຶນສຳປະທານ) ແລະ ໃບອະນຸຍາດປຸກສ້າງ (ກໍລະນີ ບໍລິສັດ/ໂຮງງານ ຂໍປຸກສ້າງໃໝ່);
6. ສຳເນົາ ແຜນນຳເຂົ້າ ໃນປີຜ່ານມາ;
7. ສຳເນົາ ແຜນການ ປະຈຳປີ ຂອງວິສາຫະກິດ ທີ່ຜ່ານການຮັບຮອງຈາກ ຂະແໜງອຸດສາຫະກຳ ແລະ ການຄ້າ (ໃນກໍລະນີ ບັນດາວິສາຫະກິດ ຫຼື ໂຮງງານທີ່ທຳການຜະລິດ). ສຳລັບການນຳເຂົ້າທາດເຄມີ ຕ້ອງມີໃບຢັ້ງຢືນທາດເຄມີ ຈາກກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນ.

## 10. ຂັ້ນຕອນການພິຈາລະນາ ແຜນນຳເຂົ້າ

**ແຜນນຳເຂົ້າປະຈຳປີ:** ພາຍຫຼັງໄດ້ຮັບເອກະສານຄຳຮ້ອງຂໍຮັບຮອງແຜນນຳເຂົ້າປະຈຳປີຄົບຖ້ວນ, ຖືກ ຕ້ອງ ແລະ ສອດຄ່ອງແລ້ວ ຂະແໜງແຜນການ ແລະ ການລົງທຶນ ຄົ້ນຄວ້ານຳສະເໜີຕໍ່ກອງປະຊຸມພິຈາລະນາຜ່ານແຜນນຳເຂົ້າປະຈຳປີ ທີ່ຈັດຂຶ້ນໂດຍ ຂະແໜງແຜນການ ແລະ ການລົງທຶນ ຊຶ່ງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ ພາຍໃນ 07 ວັນລັດຖະການ. ຫຼັງຈາກນັ້ນ, ວິສາຫະກິດ ຕ້ອງປັບປຸງແຜນນຳເຂົ້າ ຕາມມະຕິກອງປະຊຸມ ພາຍໃນ 15 ວັນລັດຖະການ; ກໍລະນີ ວິສາຫະກິດ ຫາກບໍ່ປັບປຸງແຜນ ພາຍໃນກຳນົດເວລາດັ່ງກ່າວ ຖືວ່າວິສາຫະກິດນັ້ນໄດ້ສະຫຼະສິດໃນການຮັບນະໂຍບາຍ, ຖ້າວິສາຫະກິດຕ້ອງການສືບຕໍ່ຂໍນະໂຍບາຍ ແມ່ນໃຫ້ຍື່ນເອກະສານຄືນໃໝ່. ພາຍຫຼັງວິສາຫະກິດປັບປຸງແຜນນຳເຂົ້າຕາມມະຕິກອງປະຊຸມແລ້ວ, ຂະແໜງແຜນການ ແລະ ການລົງທຶນ ຄົ້ນຄວ້າ ແລະ ພິຈາລະນາ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນ 07 ວັນລັດຖະການ.

**ສຳລັບໂຄງການໄຟຟ້າ ແລະ ບໍ່ແຮ່ ທີ່ມີສັນຍາສຳປະທານກັບລັດຖະບານ:** ພາຍ ຫຼັງໄດ້ຮັບເອກະສານຄຳຮ້ອງຂໍຮັບຮອງແຜນນຳເຂົ້າຄົບຖ້ວນຖືກຕ້ອງ ແລະ ສອດຄ່ອງແລ້ວ, ຂະແໜງ ພະລັງງານ ແລະ ບໍ່ແຮ່ ຄົ້ນຄວ້ານຳສະເໜີຕໍ່ກອງປະຊຸມພິຈາລະນາຜ່ານແຜນນຳເຂົ້າ ທີ່ຈັດຂຶ້ນໂດຍ ຂະແໜງພະລັງງານ ແລະ ບໍ່ແຮ່ ຊຶ່ງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ ພາຍໃນ 07 ວັນລັດຖະການ. ຫຼັງຈາກນັ້ນ, ວິສາຫະກິດ ຕ້ອງປັບປຸງແຜນນຳເຂົ້າຕາມມະຕິກອງປະຊຸມ ພາຍໃນ 15 ວັນລັດຖະການ; ກໍລະນີ ວິສາຫະກິດ ຫາກບໍ່ປັບປຸງແຜນ ພາຍໃນກຳນົດ

ເວລາດັ່ງກ່າວ ຖືວ່າວິສາຫະກິດນັ້ນໄດ້ສະຫຼະສິດໃນການຮັບນະໂຍບາຍ, ຖ້າວິສາຫະກິດຕ້ອງການສືບຕໍ່ຂໍນະໂຍບາຍ ແມ່ນໃຫ້ຍື່ນເອກະສານຄືນໃໝ່. ພາຍຫຼັງ ວິສາຫະກິດປັບປຸງແຜນນຳເຂົ້າຕາມມະຕິກອງປະຊຸມແລ້ວ, ຂະແໜງພະລັງງານ ແລະ ບໍ່ແຮ່ ຕ້ອງນຳສົ່ງແຜນນຳເຂົ້າດັ່ງກ່າວໃຫ້ຂະແໜງແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ດຳເນີນການຄົ້ນຄວ້າ ແລະ ພິຈາລະນາ ອອກໃບຮັບຮອງແຜນນຳເຂົ້າ ພາຍໃນ 07 ວັນລັດຖະການ.

**ແຜນນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ:** ພາຍຫຼັງໄດ້ຮັບເອກະສານຄຳຮ້ອງຂໍຮັບຮອງແຜນນຳເຂົ້າເພີ່ມເຕີມຄົບຖ້ວນ, ຖືກຕ້ອງ ແລະ ສອດຄ່ອງແລ້ວ ຂະແໜງແຜນການ ແລະ ການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ດຳເນີນການຄົ້ນຄວ້າ ແລະ ພິຈາລະນາ ພາຍໃນ 07 ວັນລັດຖະການ.

ພາຍຫຼັງແຜນນຳເຂົ້າ ຖືກຮັບຮອງແລ້ວ, ຂະແໜງແຜນການ ແລະ ການລົງທຶນ ຕ້ອງນຳສົ່ງແຜນການນຳເຂົ້າ ໃຫ້ຂະແໜງການທີ່ກ່ຽວຂ້ອງ ພາຍໃນ 02 ວັນລັດຖະການ.

## 11. ການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານການໃຫ້ນະໂຍບາຍ ດ້ານພາສີ ແລະ ອາກອນມູນຄ່າເພີ່ມ

- ຂະແໜງແຜນການ ແລະ ການລົງທຶນ ເປັນຜູ້ອະນຸຍາດ ແລະ ຄຸ້ມຄອງວຽກງານການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມໃຫ້ແກ່ບັນດາວິສາຫະກິດທີ່ລົງທຶນຢູ່ ສປປ ລາວ ແລະ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການເງິນ ແລະ ຂະແໜງການອື່ນ; ພ້ອມທັງ, ກຳນົດມາດຕະການໃນການຄຸ້ມຄອງ ເພື່ອຈຳກັດຊ່ອງວ່າງການສວຍໃຊ້ວັດຖຸປະກອນທີ່ນຳເຂົ້າ ຕາມນະໂຍບາຍສົ່ງເສີມການລົງທຶນ ໃຫ້ມີຄວາມຮັດກຸມ ເພື່ອຈັດຕັ້ງຄຸ້ມຄອງການນຳໃຊ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບການ;
- ຂະແໜງການເງິນ ເປັນຜູ້ຄຸ້ມຄອງການນຳເຂົ້າຕົວຈິງ ພາຍຫຼັງທີ່ມີແຜນນຳເຂົ້າ ຕາມການອະນຸມັດຂອງຂະແໜງແຜນການ ແລະ ການລົງທຶນ ເພື່ອຫັກລົບບັນຊີການນຳເຂົ້າແຕ່ລະຄັ້ງຕາມແຜນນຳເຂົ້າ. ພ້ອມທັງ ສະຫຼຸບລາຍງານ ປະຈຳໄຕມາດ ແລະ ປະຈຳປີ ສົ່ງໃຫ້ແຜນການ ແລະ ການລົງທຶນ ແລະ ຂະແໜງການກ່ຽວຂ້ອງ ຢ່າງເປັນປົກກະຕິ.

## 12. ການສ້າງແຜນນຳເຂົ້າຂອງໂຄງການຕ່າງໆ ນອກຈາກນະໂຍບາຍສົ່ງເສີມການລົງທຶນ

- ການສ້າງແຜນນຳເຂົ້າຂອງໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ ແມ່ນສະເໜີຫາ ກະຊວງການເງິນ ເພື່ອຄົ້ນພິຈາລະນາ ຕາມດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ ສະບັບເລກທີ 75/ນຍ, ລົງວັນທີ 20 ມີນາ 2009;
- ການສ້າງແຜນການນຳເຂົ້າໂຄງການລົງທຶນຂອງລັດ ແມ່ນສະເໜີຫາກະຊວງການເງິນ ເປັນຜູ້ຄົ້ນຄວ້າພິຈາລະນາ ຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ການສ້າງແຜນນຳເຂົ້າຂອງຜູ້ພັດທະນາ ຫຼື ຜູ້ລົງທຶນ ຢູ່ເຂດເສດຖະກິດພິເສດ ແມ່ນສະເໜີຫາຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຕາມດຳລັດວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018.

## 13. ມາດຕະການຕໍ່ຜູ້ລະເມີດ

ພາຍຫຼັງ ວິສະຫະກິດ ໄດ້ຮັບໃບຮັບຮອງແຜນນຳເຂົ້າ ຈາກຂະແໜງແຜນການ ແລະ ການລົງທຶນ ເປັນ

ທີ່ຮຽບຮ້ອຍແລ້ວ ຕ້ອງນຳໃຊ້ເຂົ້າໃນເປົ້າໝາຍໂຄງການ, ຖ້າຫາກນຳໃຊ້ສິດບໍ່ຖືກຕ້ອງຕາມເປົ້າໝາຍ, ນຳໄປຈຳໜ່າຍຂາຍພາຍໃນ, ໂອນກຳມະສິດ ຫຼື ຮູບແບບການກະທຳອື່ນໆທີ່ຜິດກົດໝາຍ ຈາກການນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນດ້ວຍການຍົກເວັ້ນ, ຫຼຸດຜ່ອນ ຫຼື ນຳເຂົ້າຊົ່ວຄາວ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການເງິນ (ພາສີ) ຕ້ອງຖືກດຳເນີນຄະດີເສຍພາສີ-ອາກອນ ພ້ອມປັບໃໝ ຕາມສະຖານເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ຢ່າງເຂັ້ມງວດ.

## 14. ການຈັດຕັ້ງປະຕິບັດ

ມອບໃຫ້ ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງພະລັງງານ ແລະ ບໍ່ແຮ່ ໂດຍສົມທົບກັບຂະແໜງການກ່ຽວຂ້ອງ ຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ຢ່າງເຂັ້ມງວດ.

## 15. ຜົນສັກສິດ

ບົດແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ຫຼັງຈາກ 15 ວັນ ນັບແຕ່ວັນລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ. ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

**ປະທານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງ**
**ການລົງທຶນ ຂັ້ນສູນກາງ**

**ສອນໄຊ ສີພັນດອນ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ 0457/ກຜທ

ນະຄອນຫຼວງວຽງຈັນ, ວັນທີ 27 ກຸມພາ 2019

# ຄຳແນະນຳ
# ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງ ທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມ ກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ, ສະບັບເລກ ທີ 135/ນຍ, ລົງວັນທີ 25 ພຶດສະພາ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງເອົາບັນຊີຄວບຄຸມ ແລະ ບັນຊີກິດຈະການສຳປະທານ ຂອງ ສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2009;
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ, ສະບັບເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018.

## ລັດຖະມົນຕີ ອອກຄຳແນະນຳ ດັ່ງນີ້:

## I. ບົດບັນຍັດທົ່ວໄປ

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ດຳລັດຂອງ

ນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ໃນການກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການພິຈາລະນາ ອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ທີ່ນຳໃຊ້ທີ່ດິນລັດ ຫຼື ທີ່ດິນພົນລະເມືອງລາວ ເພື່ອດຳເນີນທຸລະກິດ ຜະລິດກະສິກຳ ທີ່ມີຄວາມປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ແນໃສ່ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ລົງທຶນ, ຂອງ ລັດ, ລວມໝູ່ ແລະ ປະຊາຊົນ, ສາມາດເຊື່ອມໂຍງເຂົ້າກັບເສດຖະກິດພາກພື້ນ ແລະ ສາກົນ ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດສີຂຽວ ແລະ ຍືນຍົງ.

## 2. ການລົງທຶນປູກພືດກະສິກຳ

ການລົງທຶນປູກພືດກະສິກຳ ແມ່ນການນຳໃຊ້ ເງິນທຶນ, ພາຫະນະ, ເຕັກນິກ ແລະ ວິຊາການ ເຂົ້າໃສ່ ການດຳເນີນກິດຈະການປູກພືດກະສິກຳ ທີ່ຕິດພັນກັບການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ຫຼື ເຊົ່າທີ່ດິນ ຈາກພົນລະເມືອງລາວ ຢ່າງຖືກຕ້ອງຕາມກົດໝາຍ.

ການລົງທຶນປູກພືດກະສິກຳ ຕ້ອງຜ່ານຂັ້ນຕອນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ສຶກສາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ໂດຍມີການຮັບຮອງຈາກຂະ ແໜງການກ່ຽວຂ້ອງ.

## 3. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້;

1. **ການລົງທຶນ** ໝາຍເຖິງ ການນຳເອົາເງິນທຶນ, ຊັບສິນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອມາດຳເນີນ ທຸລະກິດຢູ່ ສປປ ລາວ;
2. **ຜູ້ລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນຢູ່ພາຍໃນ ສປປ ລາວ ຫຼື ຕ່າງປະເທດ ຢ່າງຖືກຕ້ອງຕາມກົດໝາຍ;
3. **ຜູ້ລົງທຶນພາຍໃນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ລາວ ຫຼື ຕ່າງປະເທດ ທີ່ຈົດທະບຽນດຳເນີນທຸລະ ກິດຕາມກົດໝາຍ ຂອງ ສປປ ລາວ;
4. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ເຂົ້າມາລົງທຶນ ຢູ່ ສປປ ລາວ;
5. **ພືດກະສິກຳ** ໝາຍເຖິງ ພືດທຸກຊະນິດທີ່ມີຂະບວນການປູກ, ບົວລະບັດຮັກສາ, ການເກັບກ່ຽວ ແລະ ການເກັບມ້ຽນຜົນຜະລິດ ເພື່ອສົ່ງອອກສູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ;
6. **ພືດລົ້ມລຸກ** ໝາຍເຖິງ ພືດທີ່ມີຮອບວຽນຂອງຊີວິດທີ່ສາມາດໃຫ້ຜົນຜະລິດໄດ້ໃນໄລຍະເວລາຕ່ຳ ກວ່າ 1 ປີ ລົງມາ ຫຼື ສາມາດປູກ ແລະ ເກັບກ່ຽວຜົນຜະລິດໄດ້ໃນຫຼາຍຮອບວຽນພາຍໃນໜຶ່ງປີ;
7. **ມາດຕະຖານ** ໝາຍເຖິງ ການກຳນົດຄຸນລັກສະນະສະເພາະ ຂອງຜະລິດຕະພັນ, ສິນຄ້າ, ການ

ບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ອື່ນໆ ທີ່ກ່ຽວຂ້ອງກັບຄຸນນະພາບ;

8. **ການຜະລິດກະສິກຳທີ່ດີ** (Good Agriculture Practice "GAP") ໝາຍເຖິງ ການນຳໃຊ້ວິທີການ ເພື່ອປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງ ທີ່ເປັນອັນຕະລາຍ ອາດເກີດຂຶ້ນໃນລະຫວ່າງການຜະລິດ, ການເກັບກ່ຽວ ແລະ ຫຼັງການເກັບກ່ຽວ;
9. **ສານເຄມີ** ໝາຍເຖິງ ຝຸ່ນເຄມີ, ຢາປາບສັດຕູພືດ, ຢາຂ້າຫຍ້າ, ຮໍໂມນ, ສານເຄືອບຜິວ ແລະ ແຮ່ທາດບຳລຸງດິນ;
10. **ສານເຄມີທີ່ຕ້ອງຫ້າມ** ໝາຍເຖິງ ສານເຄມີທີ່ບໍ່ອະນຸຍາດໃຫ້ນຳເຂົ້າ ແລະ ນຳໃຊ້ຢູ່ໃນທຸກພື້ນທີ່ຂອງ ສປປ ລາວ ຊຶ່ງຖືກກຳນົດໃນຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ, ສະບັບເລກທີ 2860/ກປ, ລົງວັນທີ 11 ມິຖຸນາ 2010;
11. **ແນວພັນພືດ** ໝາຍເຖິງ ເມັດພັນ ຫຼື ຊິ້ນສ່ວນພືດ ຫຼື ເນື້ອເຫຍື່ອ ທີ່ໃຊ້ເຂົ້າໃນການປູກ;
12. **ສັນຍາການລົງທຶນ** ໝາຍເຖິງ ການຕົກລົງ ລະຫວ່າງ ຜູ້ລົງທຶນ ກັບ ລັດ ຫຼື ພົນລະເມືອງລາວ ທີ່ຄອບຄອງສິດນຳໃຊ້ທີ່ດິນ ໂດຍການນຳໃຊ້ທີ່ດິນດັ່ງກ່າວ ເພື່ອດຳເນີນທຸລະກິດປູກພືດກະສິກຳ;
13. **ບົດບັນທຶກຄວາມເຂົ້າໃຈ** ໝາຍເຖິງ ເອກະສານບັນທຶກການຕົກລົງ ລະຫວ່າງ ນິຕິບຸກຄົນ ກັບອົງການຂອງລັດ ທີ່ໄດ້ຮັບມອບໝາຍ ເພື່ອໃຫ້ສິດໃນການສຶກສາຄວາມເປັນໄປໄດ້ຂອງໂຄງການ;
14. **ອົງການປົກຄອງທ້ອງຖິ່ນ** ໝາຍເຖິງ ອຳນາດການປົກຄອງຂັ້ນແຂວງ, ເມືອງ ແລະ ບ້ານ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ;
15. **ກິດຈະການທີ່ຢູ່ໃນບັນຊີຄວບຄຸມ** ໝາຍເຖິງ ປະເພດທຸລະກິດທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນຄວາມສົມດຸນ ການພັດທະນາບັນດາຂະແໜງການເສດຖະກິດ ແລະ ສັງຄົມ ຊຶ່ງຕ້ອງໄດ້ຜ່ານການພິຈາລະນາໂດຍບັນດາຂະແໜງການທີ່ກ່ຽວຂ້ອງກ່ອນການອະນຸຍາດ ການລົງທຶນຈາກຫ້ອງການການບໍລິການການລົງທຶນປະຕູດຽວ ແລະ/ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
16. **ການປົກປັກຮັກສາສິ່ງແວດລ້ອມໃນການປູກຝັງ** ໝາຍເຖິງ ການຈຳກັດຜົນກະທົບອັນບໍ່ດີຕໍ່ຄົນ, ສັດ, ດິນ, ນ້ຳ, ປ່າໄມ້ ແລະ ອາກາດ ໃນການບຸກເບີກ, ກະກຽມ ແລະ ນຳໃຊ້ດິນ, ການນຳໃຊ້ນ້ຳ, ການນຳໃຊ້ຝຸ່ນ ແລະ ການເກັບຮັກສາຢາປາບສັດຕູພືດ;
17. **ທີ່ດິນຂອງພົນລະເມືອງລາວ** ໝາຍເຖິງ ທີ່ດິນທີ່ບຸກຄົນ, ຄອບຄົວ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງຂອງພົນລະເມືອງ ທີ່ໄດ້ສິດນຳໃຊ້ ຢ່າງຖືກຕ້ອງຕາມກົດໝາຍ;
18. **ການເຊົ່າທີ່ດິນຈາກພົນລະເມືອງລາວ** ໝາຍເຖິງ ການເຮັດສັນຍາເຊົ່າທີ່ດິນລະຫວ່າງຜູ້ລົງທຶນກັບບຸກຄົນ, ຄອບຄົວ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງຂອງພົນລະເມືອງລາວ ເພື່ອຈຸດປະສົງນຳໃຊ້ທີ່ດິນ ດັ່ງກ່າວເຂົ້າໃນການປູກພືດກະສິກຳ;

19. **ການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ** ໝາຍເຖິງ ການເຮັດສັນຍາເຊົ່າ ຫຼື ສຳປະທານ ທີ່ດິນລັດ ເພື່ອຈຸດປະສົງນຳໃຊ້ທີ່ດິນດັ່ງກ່າວເຂົ້າໃນການປູກພືດກະສິກຳ;
20. **ຜູ້ຖືສິດນຳໃຊ້ທີ່ດິນ** ໝາຍເຖິງ ຜູ້ທີ່ມີຊື່ໃນໃບຕາດິນ ທີ່ລັດອອກໃຫ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍທີ່ດິນ ຂອງ ສປປ ລາວ.

### 4. ຫຼັກການພິຈາລະນາອະນຸມັດການປູກພືດກະສິກຳ

ການພິຈາລະນາອະນຸມັດການລົງທຶນປູກພືດກະສິກຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ໃຫ້ມີປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ;
2. ມີຄວາມສະດວກ, ກະທັດຫັດ, ວ່ອງໄວ, ໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ມີສ່ວນຮ່ວມຂອງປະຊາຊົນ ເຂົ້າໃນການຄຸ້ມຄອງ ຕິດຕາມ, ກວດກາ ການລົງທຶນ;
4. ຮັບປະກັນປະຕິບັດຕາມຄຳແນະນຳ ແລະ ລະບຽບການ ກ່ຽວກັບການຜະລິດກະສິກຳທີ່ດີ ຂອງ ສປປ ລາວ ຫຼື ສາກົນ;
5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;
6. ຮັບປະກັນຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໂດຍສະເພາະການນຳໃຊ້ແຮງງານພາຍໃນ ຫຼື ຕ່າງປະເທດ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

### 5. ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ມີຜົນນຳໃຊ້ຕໍ່ຂະແໜງການພາກລັດ ທີ່ຮັບຜິດຊອບການພິຈາລະນາ ແລະ ຄຸ້ມຄອງການລົງທຶນ ແລະ ຜູ້ລົງທຶນ ທີ່ດຳເນີນທຸລະກິດດ້ານການປູກພືດກະສິກຳ ຢູ່ ສປປ ລາວ ລວມທັງບຸກຄົນ ທີ່ນຳໃຊ້ທີ່ດິນຂອງຕົນ ເພື່ອປູກພືດກະສິກຳເປັນສິນຄ້າ.

## II. ການພິຈາລະນາອະນຸມັດການລົງທຶນສຳລັບການປູກພືດກະສິກຳ

### 1. ການຍື່ນຄຳຮ້ອງຂໍລົງທຶນ

ຜູ້ລົງທຶນ ທີ່ມີຈຸດປະສົງລົງທຶນໃນທຸລະກິດປູກພືດກະສິກຳ ທີ່ຕ້ອງການນຳໃຊ້ດິນຂອງລັດ ຫຼື ທີ່ດິນຂອງພົນລະເມືອງລາວ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ພິຈາລະນາຕາມການແບ່ງຂັ້ນຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍທີ່ດິນ ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ ຄື:

- ໃນກໍລະນີນຳໃຊ້ທີ່ດິນລັດ ເນື້ອທີ່ດິນຫຼາຍກວ່າ 150 ເຮັກຕາ ຂຶ້ນໄປ ໃຫ້ຍື່ນຄຳຮ້ອງ ຢູ່ທີ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ທີ່ຕັ້ງຢູ່ ກະຊວງແຜນການ ແລະ ການລົງທຶນ;
- ໃນກໍລະນີນຳໃຊ້ທີ່ດິນລັດ ເນື້ອທີ່ດິນແຕ່ 150 ເຮັກຕາ ລົງມາ ໃຫ້ຍື່ນຄຳຮ້ອງ ຢູ່ທີ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນແຂວງ ທີ່ຕັ້ງຢູ່ ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ;
- ໃນກໍລະນີນຳໃຊ້ທີ່ດິນຂອງພົນລະເມືອງລາວດ້ວຍການເຊົ່າ ໃຫ້ຍື່ນຄຳຮ້ອງຢູ່ທີ່ຫ້ອງການບໍລິການ

ການລົງທຶນປະຕູດຽວ ຂັ້ນແຂວງ ທີ່ຕັ້ງຢູ່ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນ ຫຼວງ.

ການສະເໜີຂໍສຳປະທານທີ່ດິນຂອງລັດ ທີ່ເກີນກວ່າກົດໝາຍກຳນົດ ຈະບໍ່ໄດ້ຮັບການພິຈາລະນາ; ການອະນຸມັດທີ່ບໍ່ຖືກຕ້ອງຕາມກົດໝາຍ, ການອະນຸຍາດນຳໃຊ້ທີ່ດິນຄ້ອຍຊັນ 35 ອົງສາຂຶ້ນໄປ, ການປູກພືດກະສິກຳອື່ນໃສ່ດິນປູກເຂົ້າທີ່ມີການຈັດສັນແລ້ວໂດຍບໍ່ຮັບການອະນຸຍາດ, ການອະນຸມັດເນື້ອທີ່ດິນເກີນຂອບເຂດສິດ ແລະ/ຫຼື ການແບ່ງສ່ວນເນື້ອທີ່ດິນອອກເປັນຫຼາຍຕອນເພື່ອອະນຸມັດ ລ້ວນແຕ່ເປັນໂມຄະ.

## 2. ເອກະສານປະກອບຄຳຮ້ອງຂໍລົງທຶນ

ຄຳຮ້ອງ ແລະ ເອກະສານປະກອບ ການຂໍລົງທຶນ ໃຫ້ໃຊ້ພາສາລາວເປັນຫຼັກ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການພິຈາລະນາ ຊຶ່ງປະກອບມີ ດັ່ງນີ້:

1. ຄຳຮ້ອງຂໍລົງທຶນຕາມແບບພິມທີ່ກຳນົດໄວ້;
2. ປະຫວັດ ແລະ ປະສົບການ ຂອງຜູ້ລົງທຶນ ຫຼື ບໍລິສັດ, ບັດປະຈຳຕົວ, ໃບແຈ້ງໂທດ (ກໍລະນີຜູ້ລົງທຶນພາຍໃນ), ສຳເນົາໜັງສືເດີນທາງ, ໃບທະບຽນວິສາຫະກິດ (ກໍລະນີເປັນນິຕິບຸກຄົນ);
3. ສັນຍາຮ່ວມທຶນ (ກໍລະນີມີຜູ້ຖືຮຸ້ນສອງຄົນຂຶ້ນໄປ);
4. ໃບມອບສິດໃຫ້ຜູ້ຕາງໜ້າບັນດາຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດ, ໃນກໍລະນີບຸກຄົນດັ່ງກ່າວບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ;
5. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນການດຳເນີນທຸລະກິດ ຊຶ່ງກຳນົດເນື້ອໃນຕົ້ນຕໍ ເຊັ່ນ: ຈຸດປະສົງການລົງທຶນ, ຄາດຄະເນມູນຄ່າການລົງທຶນ, ທີ່ຕັ້ງໂຄງການ, ກຳນົດເວລາດຳເນີນງານ, ປະສິດທິຜົນຂອງໂຄງການ, ຄວາມຕ້ອງການດ້ານແຮງງານ, ຄວາມຕ້ອງການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ຫຼື ເຊົ່າຈາກພົນລະເມືອງລາວ, ຄວາມອາດສາມາດເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ການເງິນ, ຄາດຄະເນການແບ່ງຜົນປະໂຫຍດ, ແຜນການ ແລະ ຂັ້ນຕອນການດຳເນີນງານ, ເອກະສານຢັ້ງຢືນການສະໜັບສະໜູນທຶນຈາກບໍລິສັດແມ່;
6. ເອກະສານຢັ້ງຢືນບົດບັນທຶກກ່ຽວກັບການຈັດຫາທີ່ດິນ, ແຜນທີ່ການນຳໃຊ້ດິນ ແລະ ບົດບັນທຶກການຕົກລົງເຫັນດີຈາກຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ ທີ່ໄດ້ຮັບການຢັ້ງຢືນຈາກ ຫ້ອງການປົກຄອງບ້ານ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ບ່ອນທີ່ດິນຕັ້ງຢູ່ ຊຶ່ງຕອນດິນດັ່ງກ່າວ ຕ້ອງມີໃບຕາດິນ ຫຼື ໃບອະນຸຍາດນຳໃຊ້ທີ່ດິນຈາກລັດ;
7. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນ ຈາກສະຖາບັນການເງິນ ຫຼື ທະນາຄານ, ບົດລາຍງານຖານະການເງິນ ທີ່ຜ່ານການຢັ້ງຢືນ ສອງ ປີຫຼ້າສຸດ, ໃບຮັບຮອງ ຫຼື ຢັ້ງຢືນປະສົບການຈາກສະມາຄົມ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

8. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເບື້ອງຕົ້ນ (ຖ້າມີ);

9. ເອກະສານຢັ້ງຢືນທີ່ຢູ່ຕ່າງປະເທດ ໃນກໍລະນີເປັນຜູ້ລົງທຶນຕ່າງປະເທດ.

ພາຍຫຼັງທີ່ຜູ້ລົງທຶນປະກອບເອກະສານຄົບຖ້ວນແລ້ວໃຫ້ຍື່ນຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ທີ່ຕັ້ງຢູ່ກະຊວງແຜນການ ແລະ ການລົງທຶນ ຫຼື ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫລວງ.

## III.ຂັ້ນຕອນການພິຈາລະນາອະນຸມັດການລົງທຶນ ແລະ ການວາງເງິນຄ້ຳປະກັນການລົງທຶນ

### 1. ການພິຈາລະນາອະນຸມັດການລົງທຶນໃນກໍລະນີເຊົ່າ ຫຼື ສຳປະທານ ທີ່ດິນຈາກລັດ

ການພິຈາລະນາອະນຸມັດການລົງທຶນ ໃນກໍລະນີເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ເພື່ອປູກພືດກະສິກຳ ໃຫ້ປະຕິບັດ ດັ່ງນີ້:

1) ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານຄຳຮ້ອງ ຂໍຄຳເຫັນນຳຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງພາຍໃນ 2 ວັນລັດຖະການ ເພື່ອຄົ້ນຄວ້າ ແລະ ມີຄຳເຫັນຕອບກັບຄືນພາຍໃນ 30 ວັນລັດຖະການ;

2) ພາຍຫຼັງມີຄຳເຫັນຈາກຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້ານຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ພິຈາລະນາຕົກລົງດ້ານຫຼັກການ ພາຍໃນກຳນົດເວລາ 30 ວັນລັດຖະການ;

3) ພາຍຫຼັງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ໄດ້ຕົກລົງດ້ານຫຼັກການແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຈັດກອງປະຊຸມເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາກັບຜູ້ລົງທຶນ ໂດຍການມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານຂໍການຕົກລົງ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບຜູ້ລົງທຶນ ໂດຍແມ່ນຂະແໜງແຜນການ ແລະ ການລົງທຶນ ເປັນຜູ້ລົງນາມຕາມການມອບໝາຍຂອງທ່ານນາຍົກລັດຖະ ມົນຕີ ໃນກໍລະນີການອະນຸມັດຂອງຂັ້ນສູນກາງ ແລະ ຕາມການມອບໝາຍຂອງທ່ານເຈົ້າແຂວງ ໃນກໍລະນີການອະນຸມັດຂອງຂັ້ນທ້ອງຖິ່ນ;

4) ໃນກໍລະນີເຫັນດີ ຫ້ອງການບໍລິການ ການລົງທຶນປະຕູດຽວ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນຊາບພາຍໃນ 3 ວັນລັດຖະການ, ຜູ້ລົງທຶນຕ້ອງແຈ້ງຕອບເປັນລາຍລັກອັກສອນ ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ກ່ຽວກັບວັນເວລາທີ່ຈະເຂົ້າມາເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ພາຍໃນກຳນົດເວລາ 30 ວັນລັດຖະການ ນັບແຕ່ວັນທີ່ ຫ້ອງການບໍລິການ ການລົງທຶນປະຕູດຽວ ອອກແຈ້ງການ, ຖ້າຜູ້ລົງທຶນບໍ່ແຈ້ງຕອບ ຫຼື ບໍ່ເຂົ້າມາເຈລະຈາບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ຕາມກຳນົດເວລາດັ່ງກ່າວ ຖືວ່າຜູ້ລົງທຶນສະຫຼະສິດໃນການລົງທຶນ;

5) ຫຼັງຈາກ ເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາແລ້ວ ຜູ້ລົງທຶນ ຕ້ອງວາງເງິນຄໍ້າປະກັນຕາມທີ່ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ແລະ ຕາມການກໍານົດຂອງຂໍ້ຕົກລົງວ່າດ້ວຍການວາງເງິນຄໍ້າປະກັນສໍາລັບກິດຈະການສໍາປະທານ ສະບັບເລກທີ 2735/ກຜທ, ລົງວັນທີ 02 ພະຈິກ 2018;

6) ເມື່ອຜູ້ລົງທຶນ ສໍາເລັດການປະຕິບັດເງື່ອນໄຂຂອງບົດບັນທຶກຄວາມເຂົ້າໃຈແລ້ວ ຕ້ອງນໍາສະເໜີເອກະສານວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ຕໍ່ຂະແໜງກະສິກໍາ ແລະ ປ່າໄມ້ ເພື່ອຮັບຮອງ, ສະເໜີບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ ກັບ ບົດສໍາຫຼວດທີ່ດິນຕໍ່ຂະແໜງຊັບພະຍາກອນທໍາຊາດ ແລະ ສິ່ງແວດລ້ອມ ຮັບຮອງ. ພາຍຫຼັງການຢັ້ງຢືນຮັບຮອງຂອງຂະແໜງການກ່ຽວຂ້ອງແລ້ວ ຜູ້ລົງທຶນຈຶ່ງສະເໜີຂໍອະນຸມັດເຂົ້າສູ່ສັນຍາພັດທະນາໂຄງການຕາມຂັ້ນຕອນທີ່ກົດໝາຍກໍານົດ;

## 2. ການພິຈາລະນາອະນຸມັດການລົງທຶນໃນກໍລະນີເຊົ່າທີ່ດິນຂອງພົນລະເມືອງລາວ

ການພິຈາລະນາອະນຸມັດການລົງທຶນ ໃນກິດຈະການປູກພືດກະສິກໍາ ທີ່ນໍາໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍຮູບການເຊົ່າ ໃຫ້ປະຕິບັດດັ່ງນີ້;

### ກ. ກໍລະນີນໍາໃຊ້ເນື້ອທີ່ດິນຫຼາຍກວ່າ 10 ເຮັກຕາ ຂຶ້ນໄປ

1) ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານຄໍາຮ້ອງ ຂໍຄໍາເຫັນນໍາ ຂະແໜງການກ່ຽວຂ້ອງ ພາຍໃນເວລາ 2 ວັນລັດຖະການ ເພື່ອຄົ້ນຄວ້າ ແລະ ມີຄໍາເຫັນແຈ້ງຕອບເປັນລາຍລັກອັກສອນ ພາຍໃນເວລາບໍ່ເກີນ 8 ວັນລັດຖະການ ນັບແຕ່ໄດ້ຮັບເອກະສານຄໍາຮ້ອງເປັນຕົ້ນໄປ;

2) ພາຍຫຼັງມີຄໍາເຫັນຈາກຂະແໜງການກ່ຽວຂ້ອງແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວຕ້ອງຄົ້ນຄວ້ານໍາສະເໜີ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາພາຍໃນເວລາ 10 ວັນລັດຖະການ;

3) ພາຍຫຼັງຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໄດ້ຕົກລົງດ້ານຫຼັກການແລ້ວຫ້ອງການບໍລິການ ການລົງທຶນປະຕູດຽວ ມອບຮ່າງບົດບັນທຶກຄຸ້ມຄອງໂຄງການ ແລະ ຮ່າງສັນຍາເຊົ່າທີ່ດິນ ເພື່ອໃຫ້ຜູ້ລົງທຶນ ພິຈາລະນາ ແລະ ປຶກສາຫາລື ກັບ ເຈົ້າຂອງທີ່ດິນ. ເມື່ອຜູ້ລົງທຶນສາມາດຕົກລົງຮັບເອົາເງື່ອນໄຂ ແລະ ເຊັນ ບົດບັນທຶກຄຸ້ມຄອງໂຄງການ ຮ່ວມກັບຂະແໜງແຜນການ ແລະ ການລົງທຶນແລ້ວ ແລະ ເຊັນສັນຍາເຊົ່າທີ່ດິນກັບເຈົ້າຂອງທີ່ດິນ ຂະແໜງແຜນການ ແລະ ການລົງທຶນ ຈຶ່ງຈະອອກໃບອະນຸຍາດລົງທຶນ ແລະ ຂະແໜງອຸດສາຫະກໍາ ແລະການຄ້າ ອອກໃບທະບຽນວິສາຫະກິດໃຫ້ພາຍໃນເວລາ 5 ວັນລັດຖະການ;

4) ຫຼັງຈາກ ເຊັນບົດບັນທຶກຄຸ້ມຄອງໂຄງການ ຜູ້ລົງທຶນ ຕ້ອງວາງເງິນຄໍ້າປະກັນເພື່ອຟື້ນຟູທີ່ດິນຕາມທີ່ລະບຸໄວ້ໃນບົດບັນທຶກຄຸ້ມຄອງໂຄງການ ແລະ ຜູ້ລົງທຶນຍັງຕ້ອງນໍາເອົາບົດບັນທຶກຄຸ້ມ

ຄອງໂຄງການ ແລະ ສັນຍາເຊົ່າທີ່ດິນ ໄປແຈ້ງຕໍ່ພະແນກການເງິນແຂວງ, ນະຄອນຫຼວງ ບ່ອນກິດຈະການຕັ້ງຢູ່ ເພື່ອຊາບ. ຜູ້ລົງທຶນສາມາດຂໍຖອນເງິນຄ້ຳປະກັນດັ່ງກ່າວໄດ້ ເມື່ອໄດ້ເຮັດສຳເລັດການຟື້ນຟູທີ່ດິນຄືນ ໂດຍມີການຮັບຮອງຈາກຂະແໜງກະສິກຳ ແລະ ປ່າໄມ້.

**ຂ. ກໍລະນີນຳໃຊ້ເນື້ອທີ່ດິນ ແຕ່ 10 ເຮັກຕາ ລົງມາ**

1) ຜູ້ລົງທຶນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອສ້າງຕັ້ງເປັນນິຕິບຸກຄົນ;

2) ຫຼັງຈາກໄດ້ຮັບໃບທະບຽນວິສາຫະກິດແລ້ວ ຂະແໜງກະສິກຳ ແລະ ປ່າໄມ້ ມອບຮ່າງບົດບັນທຶກຄຸ້ມຄອງໂຄງການ ແລະ ຮ່າງສັນຍາເຊົ່າທີ່ດິນ ເພື່ອໃຫ້ຜູ້ລົງທຶນພິຈາລະນາ ແລະ ປຶກສາຫາລືກັບເຈົ້າຂອງທີ່ດິນ. ເມື່ອຜູ້ລົງທຶນສາມາດຕົກລົງຮັບເອົາເງື່ອນໄຂ ແລະ ເຊັນບົດບັນທຶກຄຸ້ມຄອງໂຄງການ ຮ່ວມກັບ ຂະແໜງກະສິກຳ ແລະ ປ່າໄມ້ ແລ້ວ ແລະ ເຊັນສັນຍາເຊົ່າທີ່ດິນກັບເຈົ້າຂອງທີ່ດິນ ຂະແໜງກະສິກຳ ແລະ ປ່າໄມ້ ຈຶ່ງຈະອອກໃບອະນຸຍາດດຳເນີນກິດຈະການ;

3) ຫຼັງຈາກ ເຊັນສັນຍາເຊົ່າທີ່ດິນ ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນ ເພື່ອຟື້ນຟູທີ່ດິນ ຕາມທີ່ລະບຸໄວ້ໃນສັນຍາເຊົ່າທີ່ດິນ ແລະ ນຳເອົາສັນຍາເຊົ່າທີ່ດິນ ໄປແຈ້ງຕໍ່ຫ້ອງການການເງິນເມືອງ ບ່ອນກິດຈະການຕັ້ງຢູ່ ເພື່ອຊາບ. ຜູ້ລົງທຶນສາມາດຂໍຖອນເງິນຄ້ຳປະກັນດັ່ງກ່າວໄດ້ ເມື່ອໄດ້ເຮັດສຳເລັດການຟື້ນຟູທີ່ດິນຄືນ ໂດຍມີການຮັບຮອງຈາກຂະແໜງກະສິກຳ ແລະ ປ່າໄມ້.

**ຄ. ກໍລະນີພົນລະເມືອງລາວ ນຳໃຊ້ທີ່ດິນຂອງຕົນ ເພື່ອປູກພືດກະສິກຳ ໃຫ້ປະຕິບັດ ດັ່ງນີ້:**

1) ຜູ້ຖືສິດນຳໃຊ້ທີ່ດິນ ຕ້ອງປະກອບຄຳຮ້ອງຂໍຂຶ້ນທະບຽນວິສາຫະກິດນຳຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອສ້າງຕັ້ງເປັນວິສາຫະກິດຕາມກົດໝາຍກຳນົດ;

2) ຫຼັງຈາກໄດ້ຮັບໃບທະບຽນວິສາຫະກິດແລ້ວ ວິສາຫະກິດດັ່ງກ່າວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳຂະແໜງກະສິກຳ ແລະ ປ່າໄມ້ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕາມລະບຽບການທີ່ກຳນົດ;

3) ຜູ້ຖືສິດນຳໃຊ້ທີ່ດິນ ທີ່ນຳໃຊ້ທີ່ດິນຂອງຕົນ ເພື່ອປູກພືດກະສິກຳ ແມ່ນບໍ່ມີການວາງເງິນຄ້ຳປະກັນ ແລະ ເງິນຟື້ນຟູທີ່ດິນ ແລະ ຕ້ອງປະຕິບັດຕາມມາດຕະຖານການຜະລິດກະສິກຳທີ່ດີ (GAP).

**3. ການຂະຫຍາຍເນື້ອທີ່ດິນສຳລັບເຊົ່າ ຫຼື ສຳປະທານ**

ຜູ້ລົງທຶນ ທີ່ມີຈຸດປະສົງ ຂະຫຍາຍເນື້ອທີ່ດິນ ສຳລັບການເຊົ່າ ຫຼື ສຳປະທານ ເພື່ອປູກພືດກະສິກຳ ແມ່ນໃຫ້ປະຕິບັດຕາມຂັ້ນຕອນການປະກອບເອກະສານທີ່ໄດ້ກຳນົດໄວ້ໃນໝວດ II ຂໍ້ 2 ແລະ ການພິຈາລະນາອະນຸມັດ ຕາມທີ່ກຳນົດໄວ້ໃນໝວດ III ຂໍ້ 1 ແລະ 2 ຂອງຄຳແນະນຳສະບັບນີ້.

ຜູ້ຖືສິດນຳໃຊ້ທີ່ດິນ ບໍ່ສາມາດໂອນສິດ ຫຼື ເອົາສິດນຳໃຊ້ທີ່ດິນຂອງຕົນ ໃຫ້ຜູ້ອື່ນເຊົ່າຕໍ່ ເພື່ອປູກພືດກະສິກຳໂດຍບໍ່ໄດ້ຜ່ານການພິຈາລະນາ ແລະ ຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງຂອງລັດ.

**4. ການວາງເງິນຄ້ຳປະກັນການປະຕິບັດບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາເຊົ່າ ຫຼື ສຳປະທານ ທີ່ດິນຈາກລັດ**

ພາຍຫຼັງການເຊັນບົດບັນທຶກຄວາມເຂົ້າໃຈ, ສັນຍາເຊົ່າ ຫຼື ສຳປະທານ ຜູ້ລົງທຶນຕ້ອງມີການວາງເງິນຄ້ຳປະກັນຕາມກົດໝາຍ ດັ່ງນີ້:

- ເນື້ອທີ່ດິນ ແຕ່ 150 ເຮັກຕາ ລົງມາ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 30,000 ໂດລາສະຫະລັດ;
- ເນື້ອທີ່ດິນ ຫຼາຍກວ່າ 150 ເຮັກຕາ ແຕ່ບໍ່ເກີນ 1,000 ເຮັກຕາ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 50,000 ໂດລາສະຫະລັດ;
- ເນື້ອທີ່ດິນ ຫຼາຍກວ່າ 1,000 ເຮັກຕາ ຂຶ້ນໄປ ໃຫ້ວາງເງິນຄ້ຳປະກັນ ຈຳນວນ 70,000 ໂດລາສະຫະລັດ.

ການຖອນເງິນຄ້ຳປະກັນ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍການວາງເງິນຄ້ຳປະກັນສຳລັບກິດຈະການສຳປະທານ ສະບັບເລກທີ 2735/ກຜທ, ລົງວັນທີ 02 ພະຈິກ 2018 ແລະ ຕາມເງື່ອນໄຂທີ່ກຳນົດໃນບົດບັນທຶກຄວາມເຂົ້າໃຈ, ສັນຍາເຊົ່າ ຫຼື ສຳປະທານ.

**5.ການວາງເງິນຄ້ຳປະກັນສຳລັບການຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມໃນກໍລະນີເຊົ່າດິນຂອງພົນລະເມືອງລາວ**

ຜູ້ລົງທຶນທີ່ດຳເນີນກິດຈະການປູກພືດກະສິກຳ ທີ່ນຳໃຊ້ທີ່ດິນຂອງພົນລະເມືອງລາວ ຈະຕ້ອງໄດ້ວາງເງິນຄ້ຳປະກັນສຳລັບການຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມ ຕາມແຕ່ລະປະເພດພືດ ດັ່ງນີ້:

- ສຳລັບການປູກພືດກະສິກຳທີ່ມີອາຍຸເກີນ 1 ປີ, ໃຫ້ວາງເງິນຄ້ຳປະກັນສຳລັບການຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມຢ່າງໜ້ອຍບໍ່ຫຼຸດ 750 ໂດລາສະຫະລັດ/1ເຮັກຕາ, ການວາງເງິນຄ້ຳປະກັນສາມາດແບ່ງເປັນ ສາມງວດໄດ້ ຄື: ງວດທີ 1 ຈຳນວນ 30%, ງວດທີ 2 ຈຳນວນ 30 % ແລະ ງວດທີ 3 ຈຳນວນ 40 % ຂອງຈຳນວນເງິນຄ້ຳປະກັນທັງໝົດ ແລະ ຈຳນວນເງິນດັ່ງກ່າວຈະເກັບຮັກສາໄວ້ຢູ່ທະນາຄານທຸລະກິດ ໂດຍການຕົກລົງກັນ ລະຫວ່າງ ເຈົ້າຂອງທີ່ດິນ, ຜູ້ລົງທຶນ ແລະ ຂະແໜງແຜນການ ແລະ ການລົງທຶນ;
- ສຳລັບການປູກພືດລົ້ມລຸກທີ່ມີອາຍຸບໍ່ເກີນ 1 ປີ ໃຫ້ວາງເງິນຄ້ຳປະກັນສຳລັບການຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມຢ່າງໜ້ອຍບໍ່ຫຼຸດ 100 ໂດລາສະຫະລັດ/1ເຮັກຕາ, ການວາງເງິນຄ້ຳປະກັນແມ່ນວາງເປັນງວດດຽວ ແລະ ຈຳນວນເງິນດັ່ງກ່າວ ຈະເກັບຮັກສາໄວ້ຢູ່ທະນາຄານທຸລະກິດ ໂດຍການຕົກລົງກັນ ລະຫວ່າງ ເຈົ້າຂອງດິນ, ຜູ້ລົງທຶນ ແລະ ຂະແໜງແຜນການ ແລະ ການລົງທຶນ.

  (ສຳລັບການປູກພືດ ປະເພດຖົ່ວແມ່ນຍົກເວັ້ນການວາງເງິນຄ້ຳປະກັນສຳລັບການຟື້ນຟູເນື້ອທີ່ດິນ).

ຜູ້ລົງທຶນ ສາມາດຖອນເງິນຄ້ຳປະກັນສຳລັບການຟື້ນຟູເນື້ອທີ່ດິນຄືນ ພ້ອມກັບອັດຕາດອກເບ້ຍເງິນຝາກໄດ້ ພາຍຫຼັງທີ່ໄດ້ປັບປຸງເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມແລ້ວ. ແຕ່ໃນກໍລະນີຜູ້ລົງທຶນ ບໍ່ປະຕິບັດ

ພັນທະການປັບປຸງເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມ. ເຈົ້າຂອງທີ່ດິນ, ຂະແໜງແຜນການ ແລະ ການລົງທຶນ, ຂະແໜງກະສິກຳ ແລະ ປ່າໄມ້ ຈະດຳເນີນການຍຶດເງິນຄ້ຳປະກັນດັ່ງກ່າວພ້ອມດອກເບ້ຍ ເພື່ອນຳມາຟື້ນຟູເນື້ອທີ່ດິນໃຫ້ກັບຄືນສູ່ສະພາບເດີມໃຫ້ກັບເຈົ້າຂອງສິດນຳໃຊ້ທີ່ດິນ.

## IV. ການບັນທຶກຂໍ້ມູນ ແລະ ການລາຍງານ

### 1. ການບັນທຶກຂໍ້ມູນ

ຜູ້ລົງທຶນຕ້ອງບັນທຶກຂໍ້ມູນລະອຽດກ່ຽວກັບການດຳເນີນທຸລະກິດຕາມແບບຟອມ ຂອງຂະແໜງການກ່ຽວຂ້ອງ ໂດຍສອດຄ່ອງຕາມຄູ່ມືແນະນຳມາດຕະຖານການຜະລິດກະສິກຳທີ່ດີ (GAP) ຂອງກະຊວງກະສິກຳ ແລະ ປ່າໄມ້ ເຊັ່ນ: ການບັນທຶກການນຳໃຊ້ສານເຄມີ, ແຫຼ່ງທີ່ມາຂອງສານເຄມີ, ຈຳນວນຄັ້ງ ແລະ ປະລິມານທີ່ໃຊ້, ການນຳໃຊ້ແນວພັນພືດປະຈຳປີ, ຜົນຜະລິດ ລວມທັງຂໍ້ມູນ ກ່ຽວກັບພະຍາດທີ່ເກີດຂຶ້ນກັບພືດ.

### 2. ການລາຍງານ

ທຸກໆທ້າຍເດືອນ ບໍລິສັດຕ້ອງສົ່ງບົດລາຍງານການດຳເນີນທຸລະກິດ ແລະ ບົດບັນທຶກຂໍ້ມູນຂອງສວນປູກ ໃຫ້ແກ່ຂະແໜງການກ່ຽວຂ້ອງ ພາຍໃນກຳນົດເວລາ ສາມສິບ ວັນ ຫຼັງຈາກມື້ສຸດທ້າຍຂອງ ທ້າຍເດືອນ ເພື່ອຕິດຕາມກວດກາ ໂດຍສອດຄ່ອງຕາມກຳນົດເວລາຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ຫາກເກີດມີພະຍາດລະບາດຮ້າຍແຮງ ຫຼື ບັນຫາກ່ຽວກັບການຜະລິດ, ຜູ້ລົງທຶນ ຫຼື ບໍລິສັດຕ້ອງໄດ້ຮີບຮ້ອນ ລາຍງານໃຫ້ອົງການປົກຄອງທ້ອງຖິ່ນຊາບ.

## V. ການໃຫ້ນະໂຍບາຍສົ່ງເສີມ ແລະ ການນຳໃຊ້ແຮງງານ

### 1. ການໃຫ້ນະໂຍບາຍສົ່ງເສີມ

ການພິຈາລະນາ ແລະ ການໃຫ້ນະໂຍບາຍສົ່ງເສີມ ແມ່ນປະຕິບັດຕາມ ມາດຕາ 11, 12, 14 ແລະ 15 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ລະບຽບການສະເພາະ ທີ່ວາງອອກແຕ່ລະໄລຍະ.

### 2. ການນຳໃຊ້ແຮງງານ

ທຸກໆຫົວໜ່ວຍທຸລະກິດຕ້ອງເຮັດສັນຍາແຮງງານກັບຜູ້ອອກແຮງງານ ຊຶ່ງແມ່ນການຕົກລົງ ລະຫວ່າງຜູ້ອອກແຮງງານ ກັບ ຜູ້ໃຊ້ແຮງງານ ຫຼື ລະຫວ່າງ ຜູ້ຕາງໜ້າຜູ້ອອກແຮງງານ ກັບ ຜູ້ຕາງໜ້າຜູ້ໃຊ້ແຮງງານ ກ່ຽວກັບເງື່ອນໄຂການເຮັດວຽກ, ເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະໂຍບາຍອື່ນ. ສັນຍາແຮງງານ ຕ້ອງສ້າງຂຶ້ນບົນພື້ນຖານຫຼັກການສະເໝີພາບ ແລະ ເຫັນດີເຫັນພ້ອມນຳກັນ ລະຫວ່າງ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ສັນຍາແຮງງານຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້: 1) ຊື່ ແລະ ນາມສະກຸນ ຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ; 2) ຂະແໜງວຽກງານ, ສິດ, ພັນທະ, ຄວາມຮັບຜິດຊອບ ແລະ ໜ້າທີ່ວິຊາສະເພາະຂອງ

ຜູ້ອອກແຮງງານ; 3) ເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ; 4) ກຳນົດເວລາຂອງສັນຍາແຮງງານ (ວັນ, ເດືອນ, ປີ ເລີ່ມຕົ້ນ ແລະ ສິ້ນສຸດຂອງສັນຍາ); 5) ບ່ອນຢູ່ປະຈຸບັນຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ; 6) ຮູບການເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານ; 7) ກຳນົດເວລາທົດສອບຄວາມສາມາດຂອງຜູ້ອອກແຮງງານ; 8) ສະຫວັດດີການ ແລະ ນະໂຍບາຍອື່ນຂອງຜູ້ອອກແຮງງານ; 9) ວັນເຮັດວຽກ, ເວລາພັກຜ່ອນ ແລະ ວັນພັກ; 10) ຜົນປະໂຫຍດທີ່ຜູ້ອອກແຮງງານຈະໄດ້ຮັບຫຼັງຈາກສິ້ນສຸດສັນຍາແຮງງານ; 11) ບັນຫາອື່ນທີ່ທັງສອງ ຝ່າຍເຫັນວ່າຈຳເປັນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ໃຊ້ແຮງງານ ຕ້ອງຈັດໃຫ້ຜູ້ອອກແຮງງານ ໄດ້ຮັບການກວດສຸຂະພາບ ຢ່າງໜ້ອຍ ສອງ ຄັ້ງຕໍ່ປີ, ກວດສຸຂະພາບກ່ອນການເຂົ້າເຮັດວຽກ ແລະ ກວດສຸຂະພາບກ່ອນການອອກຈາກວຽກ. ສຳລັບຜູ້ອອກແຮງງານທີ່ເຮັດວຽກກ່ຽວກັບຄວາມສ່ຽງ ແລະ ອາດເປັນອັນຕະລາຍຕໍ່ສຸຂະພາບ ແລະ/ຫຼື ເຮັດວຽກກາງຄືນຕ້ອງໄດ້ຮັບການກວດສຸຂະພາບຢ່າງໜ້ອຍ ສາມ ຄັ້ງຕໍ່ປີ.

### 3. ການຂໍອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ

ຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການກ່ຽວກັບການປູກພືດກະສິກຳ ສາມາດຂໍອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ ຊຶ່ງຕ້ອງໄດ້ຮັບອະນຸມັດໂກຕ້າ ເປັນແຕ່ລະໄລຍະ ໂດຍສະເໜີຫາກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຫຼື ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງ ເພື່ອຄົ້ນຄວ້າ, ອະນຸມັດຕາມກົດໝາຍ ແລະ ລະບຽບການ.

## VI. ການປົກປັກຮັກສາສິ່ງແວດລ້ອມ

### 1. ມາດຕະການປ້ອງກັນຜົນກະທົບ

ຜູ້ລົງທຶນມີພັນທະໃນການປົກປັກຮັກສາສິ່ງແວດລ້ອມໃນການປູກຝັງ ແລະ ກຳຈັດສິ່ງເສດເຫຼືອ ດັ່ງນີ້:

- ຮັກສາ, ປ້ອງກັນ ແລະ ຟື້ນຟູສິ່ງແວດລ້ອມ ຕາມທີ່ລະບຸໄວ້ໃນສັນຍາ ແລະ ນິຕິກຳທີ່ກ່ຽວຂ້ອງ;
- ຊົດເຊີຍຄ່າເສຍຫາຍ ໃນກໍລະນີເກີດມີຜົນກະທົບທາງລົບ ທີ່ເກີດຈາກໂຄງການການລົງທຶນຂອງຕົນ ໂດຍອີງໃສ່ນິຕິກຳທີ່ກ່ຽວຂ້ອງ ແລະ ສົມທົບກັບພາກສ່ວນກ່ຽວຂ້ອງໃນການແກ້ໄຂບັນຫາດ້ານສິ່ງແວດລ້ອມຕ່າງໆ;
- ຂຶ້ນບັນຊີລາຍຊື່ຂອງສານເຄມີ ແລະ ວັດຖຸອັນຕະລາຍ, ເຊື່ອມສະພາບ ຫຼື ໝົດອາຍຸ ພ້ອມທັງຈັດສັນສະຖານທີ່ເກັບຮັກສາຢ່າງຖືກຕ້ອງ ແລະ ເໝາະສົມ;
- ໝູນໃຊ້ຄືນ ສິ່ງເສດເຫຼືອທີ່ສາມາດໃຊ້ຄືນໄດ້. ໃນກໍລະນີທີ່ນຳໃຊ້ຝຸ່ນຊີວະພາບ, ຝຸ່ນດັ່ງກ່າວ ຕ້ອງຜ່ານຂະບວນການຕາມຫຼັກວິຊາການ ເພື່ອບໍ່ໃຫ້ນຳພະຍາດມາສູ່ຄົນ, ໃຫ້ບັນທຶກຂໍ້ມູນທີ່ລະບຸວິທີການ, ວັນ ແລະ ເວລາ ທີ່ຜະລິດຝຸ່ນຊີວະພາບດັ່ງກ່າວ;
- ເກັບມ້ຽນກ່ອນການທຳລາຍ ແລະ ຂັ້ນຕອນທຳລາຍ ສິ່ງເສດເຫຼືອຈາກການຜະລິດ ທີ່ຖືກຕ້ອງ

ແລະ ສອດຄ່ອງກັບແຜນການຄຸ້ມຄອງສິ່ງເສດເຫຼືອ ທີ່ກຳນົດຢູ່ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ຖືກຮັບຮອງ;

- ສຳລັບສິນຄ້າທີ່ບໍ່ຜ່ານມາດຕະຖານການຜະລິດກະສິກຳທີ່ດີ (GAP) ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການກ່ຽວຂ້ອງ.

**2. ການເກັບຮັກສານເຄມີ ແລະ ສິ່ງເສດເຫຼືອອັນຕະລາຍ**

ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີອັນຕະລາຍ ແມ່ນສິ່ງເສດເຫຼືອ ທີ່ເກີດຈາກການປົນເປື້ອນ, ຜະລິດຕະພັນ, ການນຳໃຊ້ ຫຼື ຈາກຜະລິດຕະພັນອື່ນ ທີ່ມີສ່ວນປະສົມຂອງສານເຄມີອັນຕະລາຍ ທີ່ບໍ່ຕ້ອງການນຳໃຊ້ແລ້ວ ຊຶ່ງອາດມີຜົນກະທົບ ຫຼື ກໍ່ໃຫ້ເກີດຜົນກະທົບຕໍ່ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ.

ບັນດາສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີອັນຕະລາຍ ຕ້ອງເກັບຮັກສາໃຫ້ຖືກຕ້ອງຕາມມາດຕະຖານຄວາມປອດໄພ ເປັນຕົ້ນ ແຍກປະເພດສິ່ງເສດເຫຼືອ, ແຍກບ່ອນເກັບມ້ຽນ, ໃສ່ພາຊະນະບັນຈຸ ແລະ ມີສະຖານທີ່ເກັບມ້ຽນສະເພາະ ຖືກຕ້ອງຕາມມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການ.

ການນຳໃຊ້ສານເຄມີ ທີ່ເປັນອັນຕະລາຍຕໍ່ສະພາບແວດລ້ອມ ແລະ ສິ່ງຊີວິດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**3. ການບຳບັດນ້ຳເສຍ**

ຜູ້ລົງທຶນມີພັນທະໃນການປົກປັກຮັກສາສິ່ງແວດລ້ອມໃນການປູກຝັງ ແລະ ການບຳບັດນ້ຳເສຍດັ່ງນີ້:

- ມີການຈັດການ ແລະ ບຳບັດນ້ຳເສຍ ທີ່ເກີດຈາກການໃຊ້ງານ ເຊັ່ນ: ນ້ຳຈາກການຊະລ້າງ, ນ້ຳຈາກຫ້ອງນ້ຳ ແລະ ນ້ຳເສດເຫຼືອຕ່າງໆ ຈາກຂະບວນການປູກ, ເກັບກ່ຽວ ແລະ ຜະລິດ ເພື່ອຫຼຸດຜ່ອນຄວາມສ່ຽງ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມໃນພື້ນທີ່ ແລະ ໃນເຂດໃກ້ຄຽງ;
- ໃຫ້ການຮ່ວມມືກັບພາກສ່ວນກ່ຽວຂ້ອງໃນການເກັບຕົວຢ່າງນ້ຳຢູ່ໃນຂະບວນການຜະລິດ ຫຼື ໃນກໍລະນີທີ່ມີຄວາມສ່ຽງຕໍ່ຜົນກະທົບທາງດ້ານສິ່ງແວດລ້ອມ.

## VII. ຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ

### 1. ຄວາມຮັບຜິດຊອບຂອງກະຊວງແຜນການ ແລະ ການລົງທຶນ (ພາກສ່ວນບໍລິການ ການລົງທຶນປະຕູດຽວ)

- ຮັບຄຳຮ້ອງຂໍລົງທຶນກ່ຽວກັບການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ເພື່ອປູກພືດກະສິກຳໃນເນື້ອທີ່ດິນຫຼາຍ ກ່ວາ 150 ເຮັກຕາ ຂຶ້ນໄປ;
- ປະສານກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງເພື່ອເອົາການປະກອບຄຳເຫັນຕໍ່ການສະເໜີຂໍລົງທຶນ;
- ຄົ້ນຄວ້າ ແລະ ລາຍງານຜົນການຄົ້ນຄວ້າຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ (ຄລທ.ສ) ເພື່ອພິຈາລະນາ ຫຼື ປະຕິເສດ ຕາມກຳນົດເວລາທີ່ລະບຸໄວ້ໃນກົດໝາຍວ່າດ້ວຍ

ການສົ່ງເສີມການລົງທຶນ.

2. **ຄວາມຮັບຜິດຊອບຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫລວງ (ພາກສ່ວນບໍລິການ ການລົງທຶນປະຕູດຽວ)**
   - ຮັບຄຳຮ້ອງຂໍລົງທຶນກ່ຽວກັບການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ເນື້ອທີ່ດິນແຕ່ 150 ເຮັກຕາ ລົງມາ ແລະ ການເຊົ່າດິນຈາກພົນລະເມືອງລາວ ເພື່ອປູກພືດກະສິກຳ;
   - ປະສານກັບພະແນກການ ແລະ ເມືອງທີ່ກ່ຽວຂ້ອງ ເພື່ອເອົາການປະກອບຄຳເຫັນຕໍ່ການສະເໜີຂໍລົງທຶນ;
   - ຄົ້ນຄວ້າ ແລະ ລາຍງາຍຜົນການຄົ້ນຄວ້າ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ (ຄລທ.ຂ) ເພື່ອພິຈາລະນາ ຫຼື ປະຕິເສດ ຕາມກຳນົດເວລາທີ່ລະບຸໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.
3. **ຄວາມຮັບຜິດຊອບຂອງຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ, ນະຄອນ**
   - ເຂົ້າຮ່ວມເປັນພະຍານໃນສັນຍາເຊົ່າທີ່ດິນ ລະຫວ່າງ ຜູ້ລົງທຶນ ກັບ ພົນລະເມືອງລາວ;
   - ຊຸກຍູ້, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ, ກິດຈະການລົງທຶນ ລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຕາມຄວາມຮັບຜິດຊອບຂອງຕົນ;
   - ລາຍງານການຈັດຕັ້ງປະຕິບັດໂຄງການ ຕໍ່ຄະນະກຳມະການສົ່ງເສີມການຄຸ້ມຄອງການລົງທຶນ ຂັ້ນແຂວງ.
4. **ຄວາມຮັບຜິດຊອບຂອງຂະແໜງການກ່ຽວຂ້ອງ**
   - ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການສະເໜີຂໍລົງທຶນ, ການເຊົ່າ ຫຼື ສຳປະທານທີ່ດິນ ເພື່ອປູກພືດກະສິກຳ ຕາມການແບ່ງຂັ້ນຄຸ້ມຄອງ;
   - ຄຸ້ມຄອງ, ຕິດຕາມ-ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການ, ກິດຈະການລົງທຶນ ຕາມພະລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;
   - ຊຸກຍູ້, ອຳນວຍຄວາມສະດວກ ລວມທັງການແກ້ໄຂສິ່ງກີດຂວາງ ແລະ ບັນຫາຕ່າງໆ ທີ່ເກີດຂຶ້ນຕາມພາລະບົດບາດ;
   - ຕິດຕາມການນຳເຂົ້າ ຝຸ່ນ, ປຸ໋ຍ, ຢາຂ້າຫຍ້າ, ຢາປາບສັດຕູພືດ, ສານເຄມີ ແລະ ການນຳໃຊ້ສານເຄມີຕ່າງໆ ທີ່ນຳໃຊ້ໃນການປູກພືດກະສິກຳ ຕາມພາລະບົດບາດ;
   - ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງລົງທຶນ ຕໍ່ ຂະແໜງແຜນການ ແລະ ການລົງທຶນ;
   - ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ແລະ ຕາມພາລະບົດບາດຂອງຕົນ.

## VIII. ສິດ ແລະ ໜ້າທີ່ຂອງຜູ້ລົງທຶນ

### 1. ສິດຂອງຜູ້ລົງທຶນ ມີດັ່ງນີ້:

- ຂໍສຳປະທານໂຄງການນຳລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ ຕາມແຕ່ລະກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ ສຳລັບການປູກພືດກະສິກຳ;
- ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
- ໄດ້ຮັບການອຳນວຍຄວາມສະດວກດ້ານຕ່າງໆ ກ່ຽວກັບການລົງທຶນຂອງຕົນ;
- ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
- ສຳລັບຜູ້ເຊົ່າ ຫຼື ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸການເຊົ່າ ຫຼື ສຳປະທານ, ໃຫ້ສືບທອດ ສັນຍາເຊົ່າທີ່ດິນ ຕາມອາຍຸຂອງສັນຍາ, ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ເປັນເຈົ້າກຳມະສິດຕໍ່ຊັບສິນ, ລວມທັງຕຶກ, ອາຄານ ຫຼື ສິ່ງປຸກສ້າງຕ່າງໆ ຂອງຕົນ ໃນທີ່ດິນ ທີ່ໄດ້ ຮັບສິດສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ, ລະບຽບ ການ ແລະ ຕາມອາຍຸສັນຍາເຊົ່າ ຫຼື ສຳປະທານທີ່ຍັງເຫຼືອຢູ່.

### 2. ໜ້າທີ່ຂອງຜູ້ລົງທຶນ ມີດັ່ງນີ້:

- ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດ ໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ ຂອງ ສປປ ລາວ;
- ໃຫ້ຄວາມຮ່ວມມື ແລະ ປະສານງານເປັນຢ່າງດີ ກັບອົງການປົກຄອງທ້ອງຖິ່ນໃນການເຄື່ອນໄຫວ ວຽກງານທຸລະກິດ;
- ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານເພດຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການ ປົກປ້ອງ ແລະ ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແກ່ ຜູ້ອອກແຮງງານລາວ;
- ປະກອບສ່ວນທາງດ້ານງົບປະມານ ໃນວຽກງານຕິດຕາມ, ກວດກາໂຄງການການລົງທຶນ;
- ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ ສາມ ເດືອນ, ຫົກ ເດືອນ ແລະ ປະຈຳປີ ຕໍ່ ຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;
- ປະກອບສ່ວນທຶນພັດທະນາທ້ອງຖິ່ນ ແລະ ຕິດຕາມໂຄງການ ໂດຍການປຶກສາຫາລື ລະຫວ່າງ ຜູ້ ລົງທຶນກັບພະແນກການຂອງແຂວງ, ນະຄອນຫຼວງ ທີ່ກຳນົດໄວ້ໃນສັນຍາຄຸ້ມຄອງໂຄງການ;
- ປະຕິບັດລະບອບປະກັນສັງຄົມ ແລະ ປະກັນໄພ ຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມກົດ ໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

- ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກຳມະບານ;
- ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;
- ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກການດຳເນີນທຸລະກິດຂອງຕົນ;
- ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;
- ປະກອບສ່ວນດ້ານງົບປະມານ ໃນວຽກງານພັດທະນາສັງຄົມ;
- ສ້ອມແປງສິ່ງສາທາລະນຸປະໂພກໃນເຂດໂຄງການ ແລະ ໃກ້ຄຽງໂຄງການ ໃນກໍລະນີເກີດຜົນກະທົບຈາກການດຳເນີນໂຄງການຂອງຕົນ ເຊັ່ນ: ຄອງເໝືອງ, ທໍ່ນ້ຳ, ສາຍໄຟ ແລະ ເສັ້ນທາງ ໃຫ້ຄືນສູ່ສະພາບເດີມ;
- ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນການປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ, ລະບຽບການ ແລະ ມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ກຳນົດໄວ້;
- ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດຕາມມາດຕະການທີ່ຈຳເປັນເພື່ອແກ້ໄຂສະພາບດັ່ງກ່າວຢ່າງທັນການ ຕາມກົດໝາຍ, ລະບຽບການ ແລະ ມາດຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ກຳນົດໄວ້;
- ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
- ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ;
- ດຳເນີນໂຄງການປູກພືດດ້ວຍການນຳໃຊ້ວິທີການທີ່ປອດໄພ ເຊັ່ນ: ການນຳໃຊ້ຝຸ່ນ, ປຸ໋ຍ, ຢາປາບສັດຕູພືດ ຢາຂ້າຫຍ້າ, ການນຳໃຊ້ເຄື່ອງຈັກ, ອຸປະກອນ ແລະ ອື່ນໆ;
- ພາຍຫຼັງສິ້ນສຸດໂຄງການຕ້ອງໄດ້ຟື້ນຟູພື້ນທີ່ເຂດແດນຂອງດິນຄືນຕາມໃບຕາດິນ, ໃບນຳໃຊ້ທີ່ດິນ, ແຜນທີ່ດິນ ກ່ອນສົ່ງຄືນເຈົ້າຂອງເດີມ;
- ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ໃນກໍລະນີພົບເຫັນວ່າຜູ້ລົງທຶນ ມີການລະເມີດເງື່ອນໄຂຂອງສັນຍາສຳປະທານ, ສັນຍາຄຸ້ມຄອງໂຄງການ, ບົດບັນທຶກຄຸ້ມຄອງໂຄງການ ຫຼື ຂໍ້ຫ້າມ ແລະ ລະບຽບການຕ່າງໆ ຂອງລັດ ຈະຖືກກ່າວເຕືອນໃຫ້ປັບປຸງແກ້ໄຂ ພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບແຕ່ວັນທີອອກໜັງສືແຈ້ງເຕືອນເປັນຕົ້ນໄປ, ແຕ່ຖ້າບໍ່ມີການປັບປຸງແກ້ໄຂຈະອອກໜັງສືແຈ້ງໂຈະການລົງທຶນພາຍໃນກຳນົດເວລາ ສີ່ສິບຫ້າ ວັນ ແລະ ຫຼັງຈາກນັ້ນ ຫາກຍັງບໍ່ມີ ການປັບປຸງຕາມກຳນົດເວລາດັ່ງກ່າວ ກໍ່ຈະມີການສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ຫຼື ຂັ້ນແຂວງ ເພື່ອຖອນໃບອະນຸຍາດລົງທຶນຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ແລະ ນິຕິກຳທີ່ກ່ຽວຂ້ອງ.

## IX. ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ

- ອຳນວຍຄວາມສະດວກ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ, ຕິດຕາມ ກວດກາໂຄງການລົງທຶນ ຕາມກົດໝາຍ ແລະ ລະບຽບການ ແລະ ມາດຕະຖານການຜະລິດກະສິກຳທີ່ດີ (GAP) ທີ່ໄດ້ລະບຸໄວ້ໃນການສັນຍາການລົງທຶນ ໂດຍເນັ້ນໃສ່ລະບົບການນຳໃຊ້ແຫຼ່ງນ້ຳ, ການນຳໃຊ້ດິນ, ວັດຖຸອັນຕະລາຍ, ຂະບວນການຜະລິດ, ແນວພັນ, ປັດໃຈການຜະລິດ, ການເກັບກ່ຽວ, ວັດຖຸອຸປະກອນທີ່ໃຊ້ ແລະ ສຸຂະພາບຂອງຜູ້ອອກແຮງງານ;
- ເປັນເຈົ້າການໃນການຮ່າງສັນຍາ ແລະ ເຂົ້າຮ່ວມໃນຂະບວນການເຈລະຈາ ເພື່ອປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ກໍຄືຜູ້ລົງທຶນ ບົນພື້ນຖານການຄອບຄອງສິດນຳໃຊ້ທີ່ດິນ;
- ດຳເນີນການປຶກສາຫາລືກັບປະຊາຊົນ ພາຍໃນເຂດຮັບຜິດຊອບຂອງຕົນ ແລະ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ລົງທຶນ ໃນການຄຸ້ມຄອງ ພ້ອມທັງແກ້ໄຂບັນຫາຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນໃນໂຄງການລົງທຶນ;
- ລາຍງານ ແລະ ສະເໜີພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການດຳເນີນທຸລະກິດ ທີ່ບໍ່ເປັນໄປຕາມສັນຍາ ຫຼື ລະບຽບການ, ທີ່ມີຜົນກະທົບຕໍ່ປະຊາຊົນ, ສັງຄົມ ແລະ ສິ່ງແວດລ້ອມ ໃນໄລຍະການກະກຽມ, ໄລຍະກຳລັງດຳເນີນກິດຈະການ ຫຼື ພາຍຫຼັງກິດຈະການຢຸດເຊົາ.

## X. ການມີສ່ວນຮ່ວມຂອງປະຊາຊົນ

- ສາມາດເຂົ້າຮ່ວມ ຫຼື ມີຄຳເຫັນ ໃນຂະບວນການສຶກສາຄວາມເປັນໄປໄດ້ຂອງໂຄງການ ກັບຜູ້ລົງທຶນ ແລະ ອຳນາດການປົກຄອງທ້ອງຖິ່ນ;
- ອາດໄດ້ຮັບຂໍ້ມູນເປັນສຳເນົາເອກະສານ ທີ່ກ່ຽວຂ້ອງກັບຕົນ ຈາກເຈົ້າຂອງໂຄງການ ໃນການດຳເນີນງານຂອງບໍລິສັດລົງທຶນ ລວມທັງຜົນໄດ້ ແລະ ຜົນເສຍ ຢ່າງຄົບຖ້ວນ;
- ສົນທະນາພາຍໃນຊຸມຊົນ ລວມທັງບົດບາດຍິງ-ຊາຍ ໂດຍມີ ຂໍ້ມູນ, ແຜນທີ່, ແຜ່ນພັບ, ໂປສເຕີ ຫຼື ວິດີໂອ ເພື່ອໃຫ້ເຂົ້າໃຈ ເຖິງຄວາມເປັນໄປໄດ້ ແລະ ຜົນກະທົບ;
- ເຈລະຈາກັບຜູ້ລົງທຶນ ເພື່ອຮັບປະກັນຜົນປະໂຫຍດຊຸມຊົນ ບົນພື້ນຖານຄວາມສະໝັກໃຈ;
- ຊອກຫາຄຳແນະນຳຈາກພາຍນອກ ກ່ຽວກັບດ້ານກົດໝາຍ ແລະ ດ້ານວິຊາການ ເພື່ອຊ່ວຍໃນການຕັດສິນໃຈ ແລະ ການຕໍ່ລອງຕ່າງໆ;
- ມີການຕັດສິນໃຈ ແລະ ມີຄວາມເອກະພາບຂອງຊຸມຊົນທັງໝົດ ໂດຍອີງໃສ່ສຽງສ່ວນຫຼາຍ ແລະ ບັນທຶກເປັນລາຍລັກອັກສອນ ແລະ ຖືກຕ້ອງທາງດ້ານກົດໝາຍ;
- ສື່ສານ ກັບຜູ້ລົງທຶນຢ່າງຕໍ່ເນື່ອງ ໃນແຕ່ລະໄລຍະຂອງໂຄງການ, ຕິດຕາມ ແລະ ລາຍງານສະພາບການດຳເນີນທຸລະກິດໃຫ້ອຳນາດການປົກຄອງຂອງຕົນຊາບ.

## XI. ການຄຸ້ມຄອງ ແລະ ກວດກາ

ທຸກການເຄື່ອນໄຫວຂອງບັນດາກິດຈະການລົງທຶນປູກພືດກະສິກຳ ລ້ວນແລ້ວແຕ່ໄດ້ຮັບການຄຸ້ມ

ຄອງ, ຕິດຕາມກວດກາ ຕາມຂະແໜງການ ໂດຍມີຂະແໜງແຜນການ ແລະ ການລົງທຶນ ເປັນເຈົ້າການດຳເນີນການກວດກາຕາມລະບົບປົກກະຕິ, ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ກວດກາແບບກະທັນຫັນ, ຊຶ່ງມີເນື້ອໃນການກວດກາ ດັ່ງນີ້:

- ກວດກາການປະຕິບັດສັນຍາການລົງທຶນ, ສັນຍາເຊົ່າທີ່ດິນ, ບົດບັນທຶກການຄຸ້ມຄອງໂຄງການ;
- ກວດກາການປະຕິບັດຂັ້ນຕອນຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ;
- ກວດກາການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະ ທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ (ກວດກາການນຳໃຊ້ແຫຼ່ງນ້ຳການນຳໃຊ້ທີ່ດິນທຳການຜະລິດ, ການນຳໃຊ້ວັດຖຸອັນຕະລາຍເຂົ້າໃນການຜະລິດ, ການຈັດການຄຸນນະພາບການ ຜະລິດ, ຂະບວນການເກັບກ່ຽວ, ສະຖານທີ່ຫຸ້ມຫໍ່ ແລະ ຂະບວນການການຈັດເກັບສິ່ງເສດເຫຼືອ, ການຂົນຍ້າຍ ແລະ ການເກັບຮັກສາວັດຖຸອຸປະກອນ);
- ກວດກາການປະຕິບັດມາດຕະການຄວາມປອດໄພຂອງແຮງງານ, ສຸຂະພາບ, ຄ່າແຮງງານ ແລະສະຫວັດດີການຂອງຜູ້ອອກແຮງງານ;
- ກວດກາການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍສະເພາະການປະຕິບັດຕາມມາດຕະຖານການຜະລິດກະສິກຳທີ່ດີ (GAP).

## XII. ບົດບັນຍັດສຸດທ້າຍ

### 1. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມສົ່ງເສີມການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ, ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບຜູ້ລົງທຶນ, ທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

### 2. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ ສຸພັນ ແກ້ວມີໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ: 0543 /ກຜທ

ນະຄອນຫຼວງວຽງຈັນ, ວັນທີ: 03 ເມສາ 2020

# ຄໍາແນະນໍາ

## ວ່າດ້ວຍການປະຢັດລາຍຈ່າຍງົບປະມານບໍລິຫານ ຂອງກະຊວງແຜນການ ແລະ ການລົງທຶນ

**ເຖິງ: ບັນດາຫົວໜ້າ ກົມ, ຫ້ອງການ, ສູນຄົ້ນຄວ້ານະໂຍບາຍການພັດທະນາ ແລະ ສູນຝຶກອົບຮົມເສດຖະກິດ-ແຜນການ ແລະການລົງທຶນ ພາຍໃນກະຊວງແຜນການ ແລະການລົງທຶນ.**

- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງ ແລະ ເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ດໍາລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ສະບັບເລກທີ 78/ລບ, ລົງວັນທີ 10 ມີນາ 2015;
- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການປະຢັດລາຍຈ່າຍຂອງລັດ ສະບັບເລກທີ 09/ນຍ, ລົງວັນທີ 19 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີຂອງຫ້ອງການ ກຜທ ສະບັບເລກທີ 142 ລົງວັນທີ 01 ເມສາ 2020.

ເພື່ອຈັດຕັ້ງປະຕິບັດຕາມມະຕິກອງປະຊຸມຄົບຄະນະບໍລິຫານງານພັກ ຄັ້ງທີ 7 ແລະ ຄັ້ງທີ 9 ສະໄໝທີ X ຂອງສູນກາງພັກ ໃນການປະຕິບັດນະໂຍບາຍປະຢັດແຫ່ງຊາດ, ດໍາລັດ ວ່າດ້ວຍ ການປະຢັດ ແລະ ຕ້ານການຟູມເຟືອຍ ສະບັບເລກທີ 78/ລບ, ລົງວັນທີ 10 ມີນາ 2015 ແລະ ຄໍາສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປະຢັດລາຍຈ່າຍຂອງລັດ ສະບັບເລກທີ 09/ນຍ, ລົງວັນທີ 19/5/2017 ເຂົ້າສູ່ວຽກງານຕົວຈິງ ພາຍໃນ ກະຊວງ ຢ່າງຈິງຈັງ ແລະ ເຂັ້ມງວດ ໂດຍການນໍາໃຊ້ງົບປະມານແຫ່ງລັດ ທີ່ລັດຖະບານຈັດສັນໃຫ້ຢ່າງປະຢັດ ແລະ ສົມເຫດສົມຜົນ.

ສະນັ້ນ, ເພື່ອຮັບປະກັນໃຫ້ການຈັດຕັ້ງເຄື່ອນໄຫວວຽກງານເປັນເສນາທິການໃຫ້ແກ່ພັກ ແລະ ລັດຖະບານ ໃນການຄຸ້ມຄອງເສດຖະກິດມະຫາພາກຂອງວຽກງານແຜນການ ແລະ ການລົງທຶນ ກໍຄືການປະຕິບັດໜ້າວຽກຈຸດສຸມຂອງ ກະຊວງ ມີຜົນສໍາເລັດດີ, ມີປະສິດທິພາບ ແລະ ປະສິດທິຜົນສູງຍິ່ງຂຶ້ນກວ່າເກົ່າ.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ອອກຄໍາແນະນໍາ ດັ່ງນີ້:

## I. ຈຸດປະສົງ

1. ໃຫ້ບັນດາກົມ, ຫ້ອງການ ແລະ ສູນຄົ້ນຄວ້ານະໂຍບາຍການພັດທະນາ ແລະ ສູນຝຶກອົບຮົມເສດຖະກິດ-ແຜນການ ຕະຫຼອດຮອດ ສາມອົງການຈັດຕັ້ງມະຫາຊົນ ພາຍໃນ ກະຊວງ ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍປະຢັດແຫ່ງຊາດ, ດໍາລັດ, ຄໍາສັ່ງ ແລະ ກໍານົດໝາຍໃຊ້ຈ່າຍງົບປະມານ ທີ່ປະກາດໃຊ້ໃນປະຈຸບັນ ເຂົ້າສູ່ວຽກງານຕົວຈິງຂອງຕົນຢ່າງເຂັ້ມງວດ ໂດຍເພີ່ມທະວີຄວາມເປັນເຈົ້າການ ໃນການນໍາພາ-ຊີ້ນໍາ ສະມາຊິກພັກ-ພະນັກງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ປະຢັດການນໍາໃຊ້ງົບປະມານແຫ່ງລັດ, ຊັບສິນຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ເວລາທາງລັດຖະການ ໃຫ້ເກີດປະໂຫຍດສູງສຸດ ທັງຮັບປະກັນໃຫ້ວຽກງານມີຜົນສໍາເລັດດີ;

2. ໃຫ້ບັນດາກົມ, ຫ້ອງການ, ສູນຄົ້ນຄວ້ານະໂຍບາຍການພັດທະນາ ແລະສູນຝຶກອົບຮົມເສດຖະກິດ-ແຜນການ ເອົາໃຈໃສ່ຄົ້ນຄວ້າກໍານົດແຜນງານ, ວຽກຈຸດສຸມ, ແຜນຄົນ, ແຜນງົບປະມານ ແລະ ໄລຍະເວລາໃນການປະຕິບັດໜ້າທີ່ການເມືອງຂອງຕົນ ຢ່າງປະຢັດ ແລະ ເໝາະສົມ; ຫຼີກລ່ຽງ ການຂຶ້ນແຜນ ແລະນໍາໃຊ້ງົບປະມານຊໍ້າຊ້ອນ ໃນໜ້າວຽກດຽວກັນ ແລະ ຮັບປະກັນຄວາມໂປ່ງໃສ ແລະ ກວດສອບໄດ້ ຕະຫຼອດເວລາ ໂດຍສຸມໃສ່ບາງດ້ານ ດັ່ງນີ້:

ຄໍາແນະນໍາສະບັບນີ້ ແມ່ນຜັນຂະຫຍາຍ ຄໍາສັ່ງ ເລກທີ 09/ນຍ, ລົງວັນທີ 19 ພຶດສະພາ 2017 ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ ໂດຍການກໍານົດເປົ້າໝາຍ, ຂັ້ນຕອນ, ວິທີການ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດວຽກງານ ແລະ ການນໍາໃຊ້ງົບປະມານຂອງລັດ ເພື່ອຊຸກຍູ້ໃຫ້ພະນັກງານຂອງຫ້ອງການ, ບັນດາກົມ, ສູນ ແລະ ຫົວໜ່ວຍງົບປະມານຂັ້ນສອງທີ່ຂຶ້ນກັບ ກຜທ ໃຫ້ມີສະຕິຕື່ນຕົວ ແລະ ເປັນເຈົ້າການໃນການປະກອບສ່ວນເຂົ້າໃນການປະຢັດລາຍຈ່າຍງົບປະມານບໍລິຫານຂອງລັດ.

## II. ເນື້ອໃນ

### 1. ປະຢັດລາຍຈ່າຍງົບປະມານບໍລິຫານປົກກະຕິ

#### 1.1. ກອງປະຊຸມ, ສໍາມະນາ ແລະ ຝຶກອົບຮົມ:

- ກອງປະຊຸມແຕ່ລະຄັ້ງແມ່ນຖືສໍາຄັນທາງດ້ານເນື້ອໃນ, ກໍານົດເວລາ ແລະ ກໍານົດເປົ້າໝາຍຜູ້ເຂົ້າຮ່ວມ ໃນກໍລະນີ ເນື້ອໃນຂອງກອງປະຊຸມ ແລະ ເປົ້າໝາຍຜູ້ເຂົ້າຮ່ວມປະຊຸມຖ້າກຸ່ມວຽກດຽວກັນ ແມ່ນໃຫ້ຄົ້ນຄວ້າລວມເອົາຫຼາຍເນື້ອໃນ ເຂົ້າປຶກສາຫາລືໃນກອງປະຊຸມດຽວກັນ;
- ກໍານົດເປົ້າໝາຍຜູ້ເຂົ້າຮ່ວມ ໃຫ້ຈໍາກັດ ໂດຍເຊີນເປົ້າໝາຍທີ່ຮັບຜິດຊອບໂດຍກົງກັບ ເນື້ອໃນຫົວຂໍ້ ແລະ ຂໍການຢືນຢັນຜູ້ເຂົ້າຮ່ວມຕົວຈິງ ກ່ອນມື້ເປີດກອງປະຊຸມ ເພື່ອເປັນຂໍ້ມູນຄິດໄລ່ງົບປະມານ ຮັບໃຊ້ກອງປະຊຸມ;

- ກຳນົດສະຖານທີ່ປະຊຸມຢູ່ພາຍໃນ ກົມ ຫຼື ກະຊວງ ຕາມຄວາມເໝາະສົມຕົວຈິງ (ໃນກໍລະນີນຳໃຊ້ງົບປະມານແຫ່ງລັດ) ແລະ ຖ້າຈຳເປັນຕ້ອງຈັດຢູ່ພາຍນອກ ຕ້ອງຂໍອະນຸມັດຈາກຄະນະນຳກະຊວງກ່ອນ; ໃນກໍລະນີນຳໃຊ້ງົບປະມານຂອງຜູ້ໃຫ້ທຶນເອງ ຫຼື ພາກສ່ວນອື່ນ ແມ່ນໃຫ້ຄົ້ນຄວ້າເປັນເອກະພາບກັບຜູ້ໃຫ້ທຶນ ເພື່ອກະຕຸກຊຸກຍູ້ທຸລະກິດພາຍໃນປະເທດ;
- ຂຶ້ນແຜນງົບປະມານຮັບໃຊ້ ໂດຍພື້ນຖານ ແມ່ນໃຫ້ສອດຄ່ອງກັບກຳນົດໝາຍໃຊ້ຈ່າຍຂອງກະຊວງການເງິນ ໃນແຕ່ລະໄລຍະ, ໃນນັ້ນ :
    - o ກໍລະນີເປັນກອງປະຊຸມລະດັບວິຊາການ ພາຍໃຕ້ການເປັນປະທານໂດຍຫົວໜ້າກົມ, ຫົວໜ້າຫ້ອງການ ແມ່ນໃຫ້ຄິດໄລ່ ນ້ຳດື່ມ, ຊາ, ກາເຟ ຕາມຈຳນວນຜູ້ເຂົ້າຮ່ວມຕົວຈິງເທົ່ານັ້ນ. ບໍ່ໃຫ້ຄິດໄລ່ປ້າຍຄຳຂວັນ, ດອກໄມ້ປະດັບ ແລະ ຄ່າອາຫານທວ່າງ;
    - o ກໍລະນີເປັນກອງປະຊຸມລະດັບສູງ ພາຍໃຕ້ການເປັນປະທານຂອງ ທ່ານຮອງລັດຖະມົນຕີຂຶ້ນໄປ ແລະ ມີບັນດາທ່ານການນຳ ກະຊວງ ກ່ຽວຂ້ອງເຂົ້າຮ່ວມ ແມ່ນໃຫ້ ຄິດໄລ່ ຄ່ານ້ຳດື່ມ ແລະ ອາຫານທວ່າງ ຕາມຈຳນວນເປົ້າໝາຍເຂົ້າຮ່ວມຕົວຈິງ. ສຳລັບປ້າຍ ແລະ ດອກໄມ້ປະດັບ ແມ່ນຄົ້ນຄວ້າໃນແຕ່ລະກໍລະນີຂອງ ກອງປະຊຸມ.
    - o ກໍລະນີເປັນກອງປະຊຸມລະດັບສູງ, ລະດັບກະຊວງ ໂດຍມີການນຳພາກສ່ວນກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ ທີ່ມີຜູ້ເຂົ້າຮ່ວມຈຳນວນຫຼາຍ ແມ່ນໃຫ້ຄິດໄລ່ຕາມກຳນົດໝາຍໃຊ້ຈ່າຍ ງົບປະມານທີ່ກະຊວງການເງິນວາງອອກໃນແຕ່ລະໄລຍະ.
- ການແຈ້ງເຊີນ ສຳລັບຢູ່ພາຍໃນກະຊວງ ແມ່ນສາມາດສົ່ງຜ່ານລະບົບເອເລັກໂຕຼນິກ (whatsApp, Line…) ແທນໜັງສືເຊີນເພື່ອຫຼຸດຜ່ອນການສຳເນົາ ໜັງສືເຊີນ , ຍົກເວັ້ນ ເປັນກອງປະຊຸມສຳຄັນທີ່ມີການຊີ້ນຳສະເພາະ.

## 1.2. ການຕ້ອນຮັບແຂກ, ການຈັດງານລ້ຽງທາງການ:

- ການຮັບແຂກ ຕ່າງປະເທດ ຂອງ ຄະນະນຳກະຊວງ, ແມ່ນຫ້ອງການກະຊວງເປັນເຈົ້າການໃນການຂຶ້ນແຜນ ແລະ ກະກຽມຄວາມພ້ອມຮອບດ້ານ ໂດຍນຳໃຊ້ງົບປະມານຂອງກະຊວງ ຕາມກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ ຫຼື ຕາມການຊີ້ນຳຂອງຄະນະນຳກະຊວງ;
- ການຈັດງານລ້ຽງຮັບຕ້ອນຮັບແຂກຕ່າງປະເທດ ຂອງ ຄະນະນຳກະຊວງ ໃຫ້ຈຳກັດຜູ້ເຂົ້າຮ່ວມງານລ້ຽງຈາກພາຍໃນກະຊວງ ຕາມການຊີ້ນຳ ກຳນົດເວລາບໍ່ໃຫ້ເກີນ 2 ຊົ່ວໂມງ; ສຳລັບຈຳນວນວິຊາການ ຕິດຕາມ ແລະ ພະນັກງານທີ່ປະຕິບັດໜ້າທີ່ ໃນງານລ້ຽງນັ້ນໆ ໃຫ້ຄົ້ນຄວ້າຕາມ ໜ້າທີ່ຮັບຜິດຊອບ ຫຼື ຕາມຂໍ້ຕົກລົງແຕ່ງຕັ້ງ ເປັນບ່ອນອີງ.
- ການຮັບແຂກ ຕ່າງປະເທດຂອງທີ່ ບັນດາກົມ, ຫ້ອງການ, ສູນ ທີ່ຂຶ້ນກັບກະຊວງ ແມ່ນຄວາມຮັບຜິດຊອບຂອງ ພາກສ່ວນກ່ຽວຂ້ອງເປັນຜູ້ຮັບຜິດຊອບເອງ ເຊັ່ນ : ງົບປະມານ,ຫ້ອງປະຊຸມ, ຄວາມພ້ອມຮອບດ້ານ ແລະ ການຕ້ອນຮັບແຂກທີ່ມາຮ່ວມປະຊຸມ.
- ການຈັດງານລ້ຽງແຕ່ລະຄັ້ງ ແມ່ນຕ້ອງຮັບປະກັນດ້ານເນື້ອໃນ ແລະ ເສີມສ້າງຄວາມສາມັກຄີທີ່ດີກັບຄະນະຜູ້ແທນ. ສຳລັບ ປະເພດ ອາຫານ ແລະ ເຄື່ອງດື່ມ ຕ້ອງນຳໃຊ້ຜະລິດຕະພັນພາຍໃນເປັນບຸລິມະສິດ;

## 1.3. ການຈັດງານລ້ຽງ ແລະ ງານສະຫຼອງວັນບຸນສຳຄັນຕ່າງໆ:

- ການສະເຫຼີມສະຫຼອງວັນບຸນສຳຄັນຕ່າງໆ ໃຫ້ໄປຕາມນະໂຍບາຍປະຢັດແຫ່ງຊາດ ໂດຍລວມເອົາຫຼາຍວຽກພ້ອມກັນ ເຊັ່ນ: ການສະຫຼຸບຜົນງານ, ການຍ້ອງຍໍ, ການເຜີຍແຜ່ນິຕິກຳ, ວິຊາສະເພາະ ແລະ ການເລົ່າມູນເຊື້ອເປັນຕົ້ນ.

## 1.4. ການໄປເຄື່ອນໄຫວວຽກທາງການ ຢູ່ພາຍໃນ, ຕ່າງປະເທດ:

### 1.4.1. ການໄປເຄື່ອນໄຫວວຽກທາງການຢູ່ພາຍໃນປະເທດ

- ໃຫ້ບັນດາກົມ, ຫ້ອງການ, ສູນ ທີ່ຂຶ້ນກັບກະຊວງ ເປັນເຈົ້າການສ້າງແຜນເຄື່ອນໄຫວວຽກງານວິຊາສະເພາະຂອງຕົນ ເປັນເດືອນ, ເປັນງວດ ແລະ ເປັນປີ ແລ້ວສົ່ງໃຫ້ຫ້ອງການກະຊວງ ສັງລວມເປັນແຜນງານຂອງກະຊວງ;
- ການເຄື່ອນໄຫວວຽກງານແຕ່ລະຄັ້ງຕ້ອງກຳນົດເວລາ, ຈຳນວນຜູ້ເຂົ້າຮ່ວມ ແລະ ນຳໃຊ້ພາຫະນະໃນການເດີນທາງ ໃຫ້ເໝາະສົມກັບໄລຍະການເຮັດວຽກຕົວຈິງ;
- ການເດີນທາງດ້ວຍລົດ ຂອງຄະນະທີ່ມີພະນັກງານລະດັບກົມຂຶ້ນໄປເປັນຫົວໜ້າຄະນະ ຕ້ອງປະສານສົມທົບ ແລະ ຊັບຊ້ອນ ພະນັກງານວິຊາການ ຮ່ວມເດີນທາງໄປນຳກັນ; ໃນກໍລະນີ ລົດບໍລິຫານລວມຂອງກະຊວງ ບໍ່ສາມາດຕອບສະໜອງໄດ້ໃນໄລຍະດັ່ງກ່າວ ໃຫ້ນຳໃຊ້ພາຫະນະລວມຂອງກົມຕົນ ຫຼື ພາຫະນະຂອງລັດທີ່ບຸກຄົນນຳໃຊ້ ໂດຍໃຫ້ຫ້ອງການກະຊວງ ຄິດໄລ່ອັດຕານ້ຳມັນໃຫ້ຕາມລະບຽບການ;
- ການເດີນທາງ ຂອງພະນັກງານທີ່ມີຕຳແໜ່ງບໍລິຫານປະເພດ 4 ລົງມາ ວິຊາການ ແມ່ນໃຫ້ນຳໃຊ້ລົດໂດຍສານ ຫຼື ລົດໄຟ ທີ່ມີໃຫ້ບໍລິການແທນ ຫຼື ປະຕິບັດຕາມໜັງສືເຊີນຂອງພາກສ່ວນກ່ຽວຂ້ອງ; ໂດຍອີງໃສ່ກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນ;
- ການເດີນທາງດ້ວຍເຮືອບິນ ອະນຸຍາດສະເພາະກໍລະນີມີຄວາມຈຳເປັນ, ຮີບດ່ວນ ແລະ ມີເວລາຈຳກັດ ໂດຍການສົມທຽບກັບຄ່າໃຊ້ຈ່າຍໃນການເດີນທາງດ້ວຍລົດ ແລະ ໃຫ້ຈຳກັດຈຳນວນຄົນເທົ່າທີ່ຈຳກັດໄດ້ ບົນພື້ນຖານໄດ້ຮັບການອະນຸມັດຈາກຄະນະນຳກະຊວງເສຍກ່ອນ.

### 1.4.2. ການໄປເຄື່ອນໄຫວວຽກທາງການຢູ່ຕ່າງປະເທດ

- ການໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ ໃຫ້ບັນດາຫົວໜ້າກົມ, ຫົວໜ້າຫ້ອງການ, ສູນ ເພີ່ມທະວີຄວາມເປັນເຈົ້າການ ໃນການຄົ້ນຄວ້າ, ເລືອກເຟັ້ນຫົວຂໍ້ ທີ່ເຫັນວ່າ ມີຄວາມຈຳເປັນແທ້ໆ ແລະ ຈຳກັດຜູ້ເຂົ້າຮ່ວມ ໂດຍໃຫ້ສອດຄ່ອງກັບໜ້າທີ່ວຽກງານວິຊາສະເພາະທີ່ຜູ້ກ່ຽວຮັບຜິດຊອບ ແລ້ວລາຍງານຂໍຄຳເຫັນ ຈາກທ່ານຮອງລັດຖະມົນຕີຜູ້ຊີ້ນຳກ່ອນແລ້ວຈຶ່ງຮຽນລາຍງານທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງ; ໃນກໍລະນີ ຫົວຂໍ້ທີ່ເຫັນວ່າແມ່ນຄວາມຮັບຜິດຊອບໂດຍກົງຂອງພາກສ່ວນກ່ຽວຂ້ອງແລ້ວ, ອາດໃຫ້ມີພຽງ 1 ທ່ານ ຈາກ ກະຊວງ ເຂົ້າຮ່ວມຕິດຕາມ ແລະ ເກັບກຳຂໍ້ມູນມາລາຍງານ ຫຼື ອາດມອບໃຫ້ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເລີຍ ແລ້ວຈຶ່ງປະສານເອົາຂໍ້ມູນມາລາຍງານ ການນຳ ກະຊວງ;

- ກໍລະນີໄດ້ຮັບການຊ່ວຍເຫຼືອດ້ານການເງິນ ຈາກອົງການຈັດຕັ້ງ, ນິຕິບຸກຄົນ ແລະ ສາກົນ ແມ່ນບໍ່ໃຫ້ ຄິດໄລ່ ແລະ ຂໍງົບປະມານຈາກກະຊວງອີກ, ຍົກເວັ້ນເງິນແຮ ໂດຍອີງຕາມການແຈ້ງເຊີນຕົວຈິງຂອງພາກສ່ວນກ່ຽວຂ້ອງ;
- ກໍລະນີ ໄດ້ຮັບທຶນສະໜັບສະໜູນຈາກໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ເພື່ອໄປທັດສະນະສຶກສາ ແລະ ເຂົ້າຮ່ວມຝຶກອົບຮົມ ຢູ່ຕ່າງປະເທດ ແມ່ນໃຫ້ຄິດໄລ່ເງິນແຮບຸກຄົນ ແລະ ເງິນແຮຄະນະຈາກພາກສ່ວນດັ່ງກ່າວເລີຍ ແລະ ບໍ່ໃຫ້ສະເໜີຂໍເງິນແຮຈາກງົບປະມານແຫ່ງລັດຕື່ມອີກ;
- ການຄິດໄລ່ເງິນແຮຄະນະ ແມ່ນໃຫ້ອີງຕາມຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຫົວໜ້າຄະນະ ທີ່ເດີນທາງ ໄປປະຕິບັດວຽກງານຢູ່ຕ່າງປະເທດ ເປັນບ່ອນອີງໃນການຄິດໄລ່.
- ໃນກໍລະນີ ພະນັກງານ ກະຊວງແຜນການ ແລະ ການລົງທຶນ ນັບແຕ່ 2 ຄົນຂຶ້ນໄປ ປະກອບເຂົ້າໃນຄະນະຂອງພາກສ່ວນອື່ນ ແລະ ບໍ່ໄດ້ເປັນຫົວໜ້າຄະນະ ແມ່ນໃຫ້ຄິດໄລ່ແຕ່ເງິນແຮບຸກຄົນເທົ່ານັ້ນ.
- ກໍລະນີງົບປະມານປະຈໍາປີໃນຮ່ວງເງິນແຮບຸກຄົນ ແລະ ເງິນແຮຄະນະ ຕາມຕົວເລກແບ່ງປັນຂອງກະຊວງການເງິນອະນຸມັດ ໝົດກ່ອນມື້ສຸດທ້າຍຂອງປີ, ແຕ່ຍັງມີຂໍ້ຕົກລົງໃຫ້ພະນັກງານໄປຕ່າງປະເທດຢູ່ ແມ່ນຈະບໍ່ໄດ້ຄິດໄລ່ເງິນແຮໃຫ້ ແລະ ຂໍ້ຕົກລົງການໄປຕ່າງປະເທດ ສະບັບດັ່ງກ່າວແມ່ນຈະບໍ່ສາມາດນໍາໄປຂໍເງິນແຮຂອງປີຕໍ່ໄປໄດ້ອີກ ໂດຍປະຕິບັດຕາມ ກົດໝາຍວ່າດ້ວຍງົບປະມານ ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015.

### 1.5. ການບໍາລຸງຮັກສາ, ສ້ອມແປງເຄື່ອງຈັກ, ວັດຖຸອຸປະກອນ, ສໍານັກງານ ແລະ ສິ່ງປຸກສ້າງ:

- ທຸກການບໍາລຸງຮັກສາ ແລະ ສ້ອມແປງ ເຄື່ອງຈັກ, ວັດຖຸອຸປະກອນ, ສໍານັກງານ ແລະສິ່ງປຸກສ້າງຕ່າງໆ ທີ່ຂຶ້ນບັນຊີເປັນຊັບສິນຂອງກະຊວງ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ໂດຍມອບໃຫ້ຫ້ອງການກະຊວງ ຮັບຜິດຊອບໃນການຄົ້ນຄວ້າ ແລະ ດໍາເນີນການປະມູນເປີດ ກວ້າງເພື່ອຄັດເລືອກຫົວໜ່ວຍຜູ້ໃຫ້ບໍລິການໃນແຕ່ລະໄລຍະ (ຍົກເວັ້ນຫົວໜ່ວຍງົບປະມານການເງິນຂັ້ນສອງ).
- ການບໍາລຸງຮັກສາ ແລະ ສ້ອມແປງ ເຄື່ອງຈັກ, ວັດຖຸອຸປະກອນ, ສໍານັກງານ ແລະສິ່ງປຸກສ້າງຕ່າງໆ ທີ່ຂຶ້ນບັນຊີເປັນຊັບສິນຂອງໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຫຼື ຊັບສິນທີ່ບໍ່ໄດ້ຈົດທະບຽນເປັນຊັບສິນລວມຂອງກະຊວງ ແມ່ນເຈົ້າຂອງຊັບສິນດັ່ງກ່າວ ເປັນຜູ້ຮັບຜິດຊອບເອງ;

### 1.6. ການນໍາໃຊ້ພາຫະນະລວມຂອງກະຊວງ :

- ການລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ຂອງຫ້ອງການ, ບັນດາກົມ ແລະ ສູນ ໃຫ້ນໍາໃຊ້ລົດບໍລິຫານລວມຂອງກົມ ຫຼື ລົດຂອງຂັ້ນກົມ, ຖ້າຫາກບໍ່ພຽງພໍ ຈຶ່ງສະເໜີຫ້ອງການກະຊວງເພື່ອນໍາໃຊ້ລົດລວມຂອງກະຊວງ ຫຼື ຄົ້ນຄວ້າວິທີການອື່ນ;
- ກ່ອນການນໍາລົດເຂົ້າສ້ອມແປງແຕ່ລະຄັ້ງຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນ ຈາກ ບໍລິສັດ/ອູ່ສ້ອມແປງ ໃນການກໍານົດລາຍການ ແລະ ລາຄາ ແລ້ວລາຍງານ ເພື່ອຂໍອະນຸມັດ, ພາຍຫຼັງສໍາ

ເລັດກໍ່ຕ້ອງໄດ້ຮັບການຢັ້ງຢືນຈາກຜູ້ສະເໜີສ້ອມແປງລົດຄັນດັ່ງກ່າວ ພ້ອມທັງມີ ເອກະສານ ຢັ້ງຢືນການສໍາລະ ແລະໃບມອບ-ຮັບລົດ ແຕ່ລະຄັ້ງ;

- ລົດບໍລິຫານລວມຕ້ອງມີຜູ້ຮັບຜິດຊອບກວດກາຕິດຕາມດ້ານເຕັກນິກ, ຮັກສາ-ອະນາໄມ ແລະ ມີການບັນທຶກຕິດຕາມການນໍາໃຊ້ລົດແຕ່ລະຄັ້ງຢ່າງເປັນປົກກະຕິ;
- ໃນກໍລະນີນໍາໃຊ້ລົດບໍລິຫານໄປວຽກສ່ວນຕົວທີ່ບໍ່ໄດ້ຮັບອະນຸຍາດ ຖ້າມີການເປ່ເພ ຫຼື ເກີດ ອຸບັດເຫດ ແມ່ນຜູ້ນໍາໃຊ້ຮັບຜິດຊອບເອງ ແລະ ໃຫ້ພາກສ່ວນກ່ຽວຂ້ອງດໍາເນີນການປະຕິບັດ ວິໄນ;
- ພາຫະນະທຸກຄັນທີ່ເປັນຊັບສິນຂອງລັດ ແລະ ໄດ້ມອບໃຫ້ພະນັກງານບໍລິຫານປະເພດ 2 ລົງມາ ເປັນຜູ້ນໍາໃຊ້ ແມ່ນມອບໃຫ້ຜູ້ນໍາໃຊ້ພາຫະນະຄັນດັ່ງກ່າວ ເປັນຜູ້ຮັບຜິດຊອບ ຄ່າບໍາລຸງຮັກສາ, ປ່ຽນຖ່າຍອາໄຫຼ່, ປ່ຽນຢາງລົດ, ປ່ຽນນໍ້າມັນເຄື່ອງ, ກວດສະພາບລົດ ແລະ ເສຍຄ່າທໍານຽມທາງ ໃນແຕ່ລະໄລຍະ ດ້ວຍຕົນເອງ.

## 1.7. ການເຊົ່າລະບົບສື່ສານ:

- ໃຫ້ຫ້ອງການ ກະຊວງ ຄົ້ນຄວ້າເຊົ່າສັນຍານອິນເຕີເນັດ ຫຼື ລະບົບສາຍສົ່ງ ເພື່ອຮັບໃຊ້ວຽກງານ ຈໍາເປັນຂອງ ກະຊວງ ແລະ ຕອບສະໜອງໃຫ້ກົມວິຊາການ ພາຍໃນກະຊວງ ຕາມຄວາມສາມາດ ຕົວຈິງຂອງງົບປະມານ ໃນແຕ່ລະປີ;
- ໃຫ້ຫ້ອງການ ປະສານສົມທົບກັບ ກົມກ່ຽວຂ້ອງ ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອຄົ້ນຄວ້າ ການຫັນເປັນທັນສະໄໝ ແລະ ການສ້າງ ເວັບໄຊ ຂອງກະຊວງ ໂດຍນໍາ ໃຊ້ລະບົບເຄືອຂ່າຍ ຂອງລັດຖະບານ ເປັນພື້ນຕໍ່ ແລະ ໂຄງການສະໜັບສະໜູນຂອງປະເທດຄູ່ ຮ່ວມພັດທະນາ ທີ່ກໍາລັງຈັດຕັ້ງປະຕິບັດ ຢູ່ພາຍໃນກະຊວງ;
- ການເຊົ່າສັນຍານອິນເຕີເນັດ ຂອງບັນດາໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຢູ່ພາຍ ໃນກະຊວງ ເພື່ອປະຕິບັດວຽກງານຂອງໂຄງການ ແມ່ນໃຫ້ເຈົ້າຂອງໂຄງການຮັບຜິດຊອບຄ່າໃຊ້ ຈ່າຍເອງ;

## 1.8. ການນໍາໃຊ້ໄຟຟ້າ, ນໍ້າປະປາ ແລະ ໂທລະສັບ:

### 1.8.1. ການນໍາໃຊ້ໄຟຟ້າ :

- ໃຫ້ຫ້ອງການ ກະຊວງຄົ້ນຄວ້າ ວິທີການປະຢັດໄຟຟ້າ ພາຍໃນກະຊວງ ເຊັ່ນ : ການຕິດຕັ້ງລະບົບ ໄຟຟ້າແສງອາທິດ, ການນໍາໃຊ້ລະບົບເປີດສະວິກໄຟຟ້າ ຕາມໂມງ, ການປ່ຽນດອກໄຟປະຢັດ ພະລັງງານ(LED) ແລະ ອື່ນໆ;
- ໃຫ້ພະນັກງານ-ລັດຖະກອນ ທຸກຄົນ ມີສະຕິ ແລະ ມີຄວາມຮັບຜິດຊອບ:
  - ປິດ/ມອດ ໄຟຟ້າ, ພັດລົມ, ແອເຢັນ ແລະ ເຄື່ອງໃຊ້ໄຟຟ້າທຸກຊະນິດ ໃນເວລາບໍ່ຢູ່ໃນ ຫ້ອງເຮັດວຽກຂອງຕົນ;
  - ປິດ/ມອດ ດອກໄຟຕາມລະບຽງທາງຍ່າງ ຂອງຊັ້ນຕົນ ຫຼື ເປີດເທົ່າທີ່ຈໍາເປັນເພື່ອໃຫ້ມີ ແສງສະຫວ່າງພຽງພໍ ແລະ ໃນເວລາ 12:30-13:30 ໂມງຕອນສວາຍ ໃຫ້ມອດໄຟທຸກ

ຊະນິດ ຍົກເວັ້ນກໍລະນີທີ່ຈຳເປັນເຊັ່ນ: ການກະກຽມວຽກງານທີ່ສຳຄັນຮີບດ່ວນ, ມີກອງປະຊຸມ, ຫ້ອງຄວບຄຸມ ເຊີບເວີ (server)

- ມອບໃຫ້ພະແນກບໍລິຫານ ຂອງແຕ່ລະກົມ, ຫ້ອງການ, ສູນ ແຕ່ງຜູ້ຮັບຜິດຊອບ ເພື່ອກວດກາການເປີດ-ປິດ ເຄື່ອງໃຊ້ໄຟຟ້າພາຍໃນກົມ, ຫ້ອງການ, ສູນຂອງຕົນ ເປັນປະຈຳ.
- ການນຳໃຊ້ຫ້ອງປະຊຸມ ແລະ ຫ້ອງຮັບແຂກ ຂອງກະຊວງ ພາຍໃນແຕ່ລະພາກສ່ວນ ຕ້ອງມີຜູ້ຮັບຜິດຊອບ ປິດ ເຄື່ອງໃຊ້ໄຟຟ້າທຸກຊະນິດ ພາຍຫຼັງປະຊຸມສຳເລັດ;
- ໃຫ້ຫ້ອງການ ກະຊວງ ແລະ ບັນດາຫົວໜ່ວຍງົບປະມານຂັ້ນສອງ ຕິດຕາມຈົດນັບເລກກົງເຕີ (ໝໍ້ນັບໄຟ) ແລະ ໃບຮຽກເກັບເງິນຄ່າໄຟຟ້າ ເປັນປະຈຳ, ຖ້າເຫັນວ່າ ຄ່າໄຟຟ້າເພີ່ມຂຶ້ນຜິດປົກກະຕິຕ້ອງກວດກາຄືນ ແລະ ປະສານຫາລັດວິສາຫະກິດໄຟຟ້າລາວ ມາກວດກາ ແລະ ແກ້ໄຂໃຫ້ທັນເວລາ;
- ໃຫ້ຫ້ອງການ ກະຊວງ ແລະ ບັນດາຫົວໜ່ວຍງົບປະມານຂັ້ນສອງ ຕິດປ້າຍເຕືອນສະຕິໃນການປິດ/ ມອດເຄື່ອງໃຊ້ໄຟຟ້າ **<<ຢ່າລືມມອດໄຟ ເມື່ອອອກຈາກຫ້ອງການ>> <<ທ່ານມອດໄຟແລ້ວບໍ?>>** ໃສ່ບ່ອນທີ່ເໝາະສົມ ຕົວຢ່າງ: ທາງເຂົ້າລິບ, ທາງເຂົ້າຕຶກອາຄານ, ທາງຂຶ້ນ/ລົງ ຂັ້ນໄດແຕ່ລະຊັ້ນ ;

### 1.8.2 ການນຳໃຊ້ນ້ຳປະປາ:

- ໃຫ້ພະນັກງານ-ລັດຖະກອນທັງໝົດ ພາຍໃນກະຊວງ ເປັນເຈົ້າການ:
    - o ຕິດຕາມ, ກວດກາເປັນປະຈຳການນຳໃຊ້ນ້ຳປະປາ ຢູ່ບໍລິເວນຫ້ອງການ ແລະ ສະຖານທີ່ເຮັດວຽກຂອງຕົນ, ໃນກໍລະນີ ມີນ້ຳຮົ່ວໄຫຼ ຫຼື ທໍ່ນ້ຳປະປາແຕກ ຢູ່ພາຍໃນຕຶກຂອງກະຊວງໃຫ້ຮີບຮ້ອນແຈ້ງ ພະແນກບໍລິຫານ, ຫ້ອງການ ກະຊວງ ມາແກ້ໄຂໂດຍດ່ວນ (ສຳລັບ ຕຶກສູນສະຖິຕິແຫ່ງຊາດ, ຕຶກຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດນາມ, ຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ ແລະ ຕຶກຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແມ່ນຮັບຜິດຊອບເອງ);
    - o ປິດກ໊ອກນ້ຳທຸກຄັ້ງ ກ່ອນອອກຈາກຫ້ອງນ້ຳ ຫຼື ກ່ອນກັບບ້ານ;
- ຫ້ອງການ ຕ້ອງຮີບຮ້ອນປັບປຸງແກ້ໄຂຢ່າງຮີບດ່ວນ ແລະ ທັນເວລາ ພາຍຫຼັງກວດພົບເຫັນນ້ຳປະປາຮົ່ວໄຫຼ ຫຼື ໄດ້ຮັບການແຈ້ງຈາກບັນດາກົມ, ຫ້ອງການ, ສູນ.
- ຫ້ອງການກະຊວງ ຕ້ອງກວດເບິ່ງຄ່ານຳໃຊ້ນ້ຳປະປາໃນແຕ່ລະເດືອນ ແລະ ຈົດນັບເລກໃນກົງເຕີນັບໄວ້ຢ່າງຊັດເຈນ, ຖ້າເຫັນວ່າຄ່ານຳໃຊ້ນ້ຳປະປາ ເພີ່ມຂຶ້ນຜິດປົກກະຕິ , ຕ້ອງກວດກາຄືນ ແລະ ປະສານສົມທົບກັບລັດວິສາຫະກິດນ້ຳປະປາ ເພື່ອມາກວດກາສະພາບເຕັກນິກຕ່າງໆ ແລະ ແກ້ໄຂໃຫ້ທັນເວລາ;
- ຫ້າມບຸກຄົນສວຍໂອກາດ ນຳເອົາລົດສ່ວນຕົວ ມາລ້າງໃນສະຖານທີ່ ສຳນັກງານຫ້ອງການຢ່າງເດັດຂາດ;

### 1.8.2. ການນຳໃຊ້ ໂທລະສັບ:

- ໃຫ້ຫ້ອງການກຳນົດຄືນ ຈຳນວນເລກໝາຍໂທລະສັບ ທີ່ນຳໃຊ້ໃນປະຈຸບັນ ໃຫ້ເໝາະສົມກັບໜ້າວຽກ ແລະ ບ່ອນໃດສາມາດຕໍ່ພ່ວງກັນໄດ້ແມ່ນໃຫ້ນຳໃຊ້ຮ່ວມກັນ;

- ບັນດາກົມ, ຫ້ອງການ, ສູນ ຕ້ອງເປັນເຈົ້າການໃນການນຳໃຊ້ໂທລະສັບທີ່ໄດ້ຕິດຕັ້ງໃຫ້, ຖ້າເລກໝາຍໂທລະສັບໃດໃຊ້ບໍ່ໄດ້ ແລະ ບໍ່ໄດ້ນຳໃຊ້ຕ້ອງແຈ້ງໃຫ້ຫ້ອງການກະຊວງ ແກ້ໄຂໃຫ້ທັນເວລາ ຫຼື ສົ່ງຄືນໝາຍເລກດັ່ງກ່າວ ຫຼີກເວັ້ນການຈ່າຍຄ່າເຊົ່າເກີນຄວາມຈຳເປັນ;
- ການນຳໃຊ້ໂທລະສັບ ແມ່ນໃຫ້ນຳໃຊ້ເຂົ້າໃນວຽກງານວິຊາສະເພາະເທົ່ານັ້ນ, ຫ້າມນຳໃຊ້ໃນວຽກສ່ວນຕົວທັງພາຍໃນ ຫຼື ຕ່າງປະເທດ, ຖ້າຫາກລະເມີດຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ດ້ວຍຕົນເອງ;
- ຫ້ອງການກະຊວງ ຕ້ອງກວດເບິ່ງຄ່າໂທ (ກວດເບິ່ງການໂທອອກຕ່າງປະເທດ) ໃນແຕ່ລະເດືອນ ຖ້າເຫັນວ່າ ຄ່າໂທເພີ່ມຂຶ້ນ ຜິດປົກກະຕິ ຕ້ອງກວດກາຄືນ ໃບເກັບເງິນ, ການນຳໃຊ້ ແລະ ປະສານຫາ ຜູ້ຕອບສະໜອງໝາຍເລກໂທລະສັບມາ ກວດກາ ແລະ ແກ້ໄຂໃຫ້ທັນເວລາ;
- ຫ້ອງການກະຊວງ ເປັນເຈົ້າການຄົ້ນຄວ້າກວດກາຄືນເພື່ອກຳນົດເບີໂທໃດ ທີ່ອະນຸມັດໃຫ້ໂທອອກໄປຕ່າງປະເທດໄດ້.

## 2. ປະຢັດລາຍຈ່າຍງົບປະມານການຈັດຊື້ປົກກະຕິ

### 2.1. ເຄື່ອງໃຊ້ຫ້ອງການ, ອຸປະກອນຮັບໃຊ້ ແລະ ແບບພິມ:

- ໃຫ້ຫ້ອງການກະຊວງ ແລະ ບັນດາຫົວໜ່ວຍງົບປະມານຂັ້ນສອງ ພາຍໃນກະຊວງ ຄົ້ນຄວ້າ-ຕອບສະໜອງ ເຄື່ອງໃຊ້ຫ້ອງການ, ແບບພິມ, ເຄື່ອງຈັກ ແລະ ວັດຖຸປະກອນໃຫ້ແຕ່ລະກົມ, ຫ້ອງການ ສູນ ໂດຍສອດຄ່ອງກັບ ກຳນົດໝາຍໃຊ້ຈ່າຍງົບປະມານແຫ່ງລັດ ແລະ ຜ່ານການປະມູນຢ່າງເປີດກວ້າງ ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດຢ່າງເຂັ້ມງວດ;
- ໃຫ້ແຕ່ລະກົມ, ຫ້ອງການ, ສູນ ຕ້ອງຂຶ້ນແຜນຄວາມຕ້ອງການນຳໃຊ້ແຕ່ລະໜ້າວຽກຕົວຈິງໃຫ້ຊັດເຈນ ແລະ ນຳໃຊ້ຢ່າງປະຢັດ;
- ໃຫ້ຫ້ອງການຄົ້ນຄວ້າ-ຕອບສະໜອງ ເຄື່ອງໃຊ້ຫ້ອງການ (ໂຕະ, ຕັ່ງ, ໂຊຟາຮັບແຂກ, ວັດຖຸອຸປະກອນອື່ນໆ) ໃຫ້ແກ່ບັນດາກົມ, ຫ້ອງການ, ສູນ ຕາມຄວາມຈຳເປັນ ໂດຍໃຫ້ເບິ່ງຈາກເຄື່ອງໃຊ້ຫ້ອງການທີ່ມີຢູ່ແລ້ວໃນປະຈຸບັນ ແລະ ຍັງນຳໃຊ້ໄດ້ ໃຫ້ເກີດປະໂຫຍດສູງສຸດ ເພື່ອຈຳກັດການຊື້ໃໝ່;
- ການຮ່າງເອກະສານ ເບື້ອງຕົ້ນ ເພື່ອລາຍງານ ແລະ ຂໍຄຳເຫັນຈາກການນຳຂັ້ນກົມ ໃຫ້ໝູນໃຊ້ເຈ້ຍ ທັງສອງໜ້າ ຫຼື ຮ່າງສົ່ງຜ່ານລະບົບທັນສະໄໝ ເພື່ອຊ່ວຍຫຼຸດຜ່ອນການຈັດຊື້ໃໝ່.

### 2.2. ເຄື່ອງຈັກ ແລະ ວັດຖຸອຸປະກອນ:

- ຫ້ອງການ, ບັນດາກົມ ແລະ ສູນ ຕ້ອງເປັນເຈົ້າການໃນການຄຸ້ມຄອງນຳໃຊ້, ຂຶ້ນແຜນບຳລຸງຮັກສາ, ສ້ອມແປງ ຕາມເຕັກນິກ ແລະ ສະພາບການນຳໃຊ້ຕົວຈິງ;
- ໃຫ້ນຳໃຊ້ ເຄື່ອງຄອມພິວເຕີ, ເຄື່ອງພິມເອກະສານ, ເຄື່ອງສຳເນົາເອກະສານ ແລະ ເຄື່ອງສະແກນເອກະສານ ທີ່ມີຢູ່ແລ້ວ ໃຫ້ເກີດປະໂຫຍດສູງສຸດ ເພື່ອຈຳກັດການຊື້ໃໝ່;
- ການນຳໃຊ້ຈັກພິມ (Printer) ແມ່ນໃຫ້ໃຊ້ຮ່ວມກັນ ຫຼື ເຊື່ອມຕໍ່ກັບຈັກອັດສຳເນົາ, ຄວນໃຊ້ຍີ່ຫໍ້ດຽວກັນ ແລະ ຈຳກັດການນຳໃຊ້ຈັກພິມສີ ທີ່ມີລາຄາແພງ ແລະ ສິ້ນເປືອງນ້ຳມຶກ;
- ໃຫ້ຫ້ອງການສືບຕໍ່ເຊົ່າ ຈັກອັດສຳເນົາເອກະສານ ແລະ ຄົ້ນຄວ້າເຊົ່າເຄື່ອງໃຊ້ ICT ຈາກພາຍນອກ ເພື່ອມາໃຫ້ບໍລິການແກ່ບັນດາກົມ, ຫ້ອງການ ແລະ ສູນ ບົນພື້ນຖານການປະມູນ ຫຼື

ປຽບທຽບລາຄາໃຫ້ບໍລິການ ຢ່າງສົມເຫດສົມຜົນ ເພື່ອຫຼຸດຜ່ອນ ຄ່າໃຊ້ຈ່າຍໃນການຊື້ໃໝ່ ແລະ ບຳລຸງຮັກສາ-ສ້ອມແປງ.

**2.3. ສຳນັກງານຫ້ອງການ:**

ຫ້ອງການ, ບັນດາກົມ, ສູນ ແລະ ຫົວໜ່ວຍງົບປະມານຂັ້ນສອງ ທີ່ຂຶ້ນກັບ ກຜທ ຕ້ອງເປັນເຈົ້າການໃນການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ຕິດຕາມກວດກາສະພາບຂອງຕຶກອາຄານຂອງກະຊວງຢ່າງເປັນປົກກະຕິ. ຖ້າຫາກເຫັນວ່າມີການເປ່ເພເສຍຫາຍໃຫ້ຮີບຮ້ອນລາຍງານຫ້ອງການກະຊວງ ຫຼື ພະແນກບໍລິຫານຂອງ ບັນດາຫົວໜ່ວຍງົບປະມານຂັ້ນສອງ ເພື່ອດຳເນີນຂັ້ນຕອນການບຳລຸງຮັກສາ-ສ້ອມແປງໃຫ້ທັນເວລາ.

**2.4. ນ້ຳມັນເຊື້ອໄຟ:**

ການຈັດຊື້ນ້ຳມັນເຊື້ອໄຟ ຕ້ອງປະຕິບັດຕາມຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ ທີ່ປະກາດໃຊ້ເປັນແຕ່ລະໄລຍະ ຢ່າງເຂັ້ມງວດ.

**2.5. ພາຫະນະ:**

- ການຈ່າຍຄ່າທຳນຽມທາງ ແລະ ຄ່າປະກັນໄພ ປະຈຳປີ ໂດຍນຳໃຊ້ງົບປະມານແຫ່ງລັດ ແມ່ນມີພຽງລົດບໍລິຫານຮັບໃຊ້ລວມຂອງກະຊວງ, ລົດການນຳຂັ້ນສູງ ແລະ ລົດທີ່ພະນັກງານ ບໍລິຫານປະເພດ 1 ຂຶ້ນໄປ ເທົ່ານັ້ນ; ສຳລັບພາຫະນະຂອງລັດ ທີ່ພະນັກງານບໍລິຫານປະເພດ 2 ນຳໃຊ້ແມ່ນຜູ້ນຳໃຊ້ພາຫະນະຄັນດັ່ງກ່າວ ເປັນຜູ້ຮັບຜິດຊອບຊຳລະເອງ;
- ການສະເໜີຂໍຈັດຊື້ໃໝ່ ຂອງບັນດາກົມ, ຫ້ອງການ, ສູນ ຕ້ອງຂຶ້ນແຜນ, ມີແຫຼ່ງງົບປະມານຊັດເຈນ ແລະ ນຳສະເໜີຄະນະນຳກະຊວງ ພິຈາລະນາ ອະນຸມັດເສຍກ່ອນ;
- ການຈັດຊື້ ຕ້ອງປະຕິບັດການປະມູນຈັດຊື້-ຈັດຈ້າງ ລວມສູນ ຢູ່ຫ້ອງການ ກະຊວງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຈັດຊື້ ຢ່າງເຂັ້ມງວດ.

**2.6. ການຈອງ-ຊື້ປີ້ຍົນ:**

- ການຈອງ ແລະ ຊື້ປີ້ເຮືອບິນໄປເຄື່ອນໄຫວວຽກງານທັງພາຍໃນ ແລະ ຕ່າງປະເທດ ໂດຍການນຳໃຊ້ງົບປະມານແຫ່ງລັດ ແມ່ນໃຫ້ລວມສູນຢູ່ຫ້ອງການກະຊວງບ່ອນດຽວເພື່ອໂອນຊຳລະຕາມລະບົບງົບປະມານໃນແຕ່ລະໄລຍະ (ຍົກເວັ້ນ ບັນດາຫົວໜ່ວຍງົບປະມານຂັ້ນສອງ); ກໍລະນີພາກສ່ວນໃດໜຶ່ງ ຈອງ ແລະ ຊື້ປີ້ຍົນເອງ ໂດຍບໍ່ໄດ້ປະສານສົມທົບກັບຫ້ອງການ ກະຊວງ ກ່ອນ ແລະ ໄດ້ຮັບອານຸມັດຈາກຂັ້ນເທິງ, ຫ້ອງການກະຊວງສາມາດປະຕິເສດ ການຊຳລະ ແລະ ບໍ່ທົດແທນຄືນການຊື້ປີ້ເຮືອບິນດັ່ງກ່າວໄດ້;
- ບັນດາກົມ, ຫ້ອງການ ແລະ ສູນ ທີ່ຂຶ້ນກັບ ກຜທ ສາມາດຈອງ ແລະ ຊື້ປີ້ເຮືອບິນເອງ ໃນກໍລະນີຫາກນຳໃຊ້ງົບປະມານຂອງພາກສ່ວນຕົນ, ການສະໜັບສະໜູນຈາກຄູ່ຮ່ວມພັດທະນາ, ຈາກອົງການຈັດຕັ້ງສາກົນ ຫຼື ຂອງບຸກຄົນ;
- ທຸກການເດີນທາງ ດ້ວຍເຮືອບິນ ໃຫ້ນຳໃຊ້ການບໍລິການຂອງລັດວິສາຫະກິດການບິນລາວ ເປັນບຸລິມະສິດ. ກໍລະນີລັດວິສາຫະກິດການບິນລາວ ບໍ່ສາມາດຕອບສະໜອງໄດ້ ຈຶ່ງອະນຸຍາດໃຫ້ນຳໃຊ້ສາຍການບິນອື່ນຕາມຄວາມເໝາະສົມ;

- ການຈັດຊື້ປີ້ເຮືອບິນແມ່ນ ໃຫ້ມີການປະມູນເອົາ ບໍລິສັດຕົວແທນຈຳໜ່າຍ ເປັນແຕ່ລະປີ.

## 3. ການນຳໃຊ້ ງົບປະມານບໍລິຫານລວມຂອງກະຊວງ

- ຫ້ອງການ, ບັນດາກົມ, ສູນ ແລະ ຫົວໜ່ວຍງົບປະມານຂັ້ນສອງ ພາຍໃນກະຊວງ ຕ້ອງຂຶ້ນແຜນຄວາມຕ້ອງການນຳໃຊ້ໃຫ້ແທດເໝາະກັບແຜນງົບປະມານລາຍຈ່າຍບໍລິຫານຂອງຕົນຕາມຕົວເລກແຜນທີ່ໄດ້ຮັບ;
- ຫ້ອງການ, ບັນດາກົມ, ສູນ ທີ່ຂຶ້ນກັບກະຊວງ ຕ້ອງຕິດຕາມ ກວດກາ ການນຳໃຊ້ງົບປະມານບໍລິຫານທີ່ແບ່ງປັນໃຫ້ ແລະ ສະຫຼຸບລາຍງານການນຳໃຊ້ງົບປະມານ ດັ່ງກ່າວ ໃຫ້ຫ້ອງການກະຊວງເປັນແຕ່ລະເດືອນ, ງວດ ແລະ ປີ ໃຫ້ທັນເວລາ.

## 4. ການປະຕິບັດໂຄງການລົງທຶນຂອງລັດພາກປົກກະຕິ

- ບັນດາກົມ, ຫ້ອງການ, ສູນ ທີ່ໄດ້ຮັບອະນຸຍາດໃຫ້ຈັດຕັ້ງປະຕິບັດໂຄງການສົ່ງເສີມວິຊາການ (ໂຄງການລົງທຶນຂອງລັດພາກປົກກະຕິ) ດັ່ງນີ້:
    - o ຂຶ້ນແຜນ ແລະ ປະກອບເອກະສານຄົບຖ້ວນ ຫາຫ້ອງການ ກະຊວງ ເພື່ອຄົ້ນຄວ້າ ແລະ ສະເໜີຂໍງົບປະມານຈັດຕັ້ງປະຕິບັດຕົວຈິງ ຈາກກະຊວງການເງິນ;
    - o ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົານັ້ນໃຫ້ສຳເລັດຕາມກຳນົດເວລາ;
    - o ຕ້ອງສ້າງບົດສະຫຼຸບລາຍງານການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ເພື່ອລາຍງານການນຳກະຊວງ ແລະ ສົ່ງສຳເນົາ 1 ຊຸດໃຫ້ແກ່ ຫ້ອງການກະຊວງ ເພື່ອຊາບ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການລົງທຶນຂອງລັດ;
- ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບໂດຍກົງ ໃນກໍລະນີທີ່ຄະນະກວດສອບ ຈາກອົງການກວດສອບແຫ່ງລັດ ຕ້ອງການເອກະສານ ຫຼື ສະໜອງຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງກັບການປະຕິບັດໂຄງການ.

## 5. ການຄຸ້ມຄອງ - ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ

- ບັນດາກົມ, ຫ້ອງການ, ສູນ ທີ່ໄດ້ຮັບທຶນສະໜັບສະໜຸນ ຫຼື ເປັນຜູ້ຈັດຕັ້ງປະຕິບັດ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງປະຕິບັດຕາມດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ເລກທີ 357/ລບ, ລົງວັນທີ 09 ຕຸລາ 2019 ຢ່າງເຂັ້ມງວດ;
- ໃນກໍລະນີ ເຈົ້າຂອງໂຄງການ ຕ້ອງການເປີດບັນຊີ ຢູ່ທະນາຄານທຸລະກິດໃດໜຶ່ງ ຕ້ອງສະເໜີ ຂໍອະນຸມັດຈາກກະຊວງການເງິນ ຕາມລະບຽບການ;
- ບັນດາກົມ, ຫ້ອງການ, ສູນ ທີ່ຈັດຕັ້ງປະຕິບັດ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາຕ້ອງສົ່ງສຳເນົາເອກະສານໂຄງການ ແລະ ລາຍງານສະພາບການຈັດຕັ້ງປະຕິບັດໂຄງການ ລວມທັງການນຳໃຊ້ງົບປະມານຕົວຈິງ ໃນແຕ່ລະໄລຍະໃຫ້ ຫ້ອງການ ກະຊວງ ເພື່ອຊາບ ແລະ ຕິດຕາມ.

## III. ການຈັດຕັ້ງປະຕິບັດ

1. ມອບໃຫ້ບັນດາທ່ານຫົວໜ້າກົມ, ຫົວໜ້າຫ້ອງການ, ຫົວໜ້າສູນ ແລະ ຄະນະບໍລິຫານງານ ຂອງສາມອົງການຈັດຕັ້ງມະຫາຊົນ ກະຊວງ ຈັດຕັ້ງເຜີຍແຜ່ ແລະ ນໍາພາ-ຊີ້ນໍາ ສະມາຊິກພັກ-ພະນັກງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ ກົມກວດກາກະຊວງ ເຮັດໜ້າທີ່ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ຄໍາສັ່ງສະບັບນີ້ ແລ້ວ ສະຫຼຸບລາຍງານ ການນໍາກະຊວງ ປະຈໍາໄຕມາດ, ປະຈໍາ 6 ເດືອນ ແລະ ປະຈໍາປີ ໂດຍຖືເອົາເປັນຂະບວນການໜຶ່ງ ປະກອບສ່ວນເຂົ້າໃນການສ້າງຂະບວນການຂໍ່ານັບຮັບຕ້ອງກອງປະຊຸມໃຫຍ່ ອົງຄະນະພັກ ຄັ້ງທີ IV ກະຊວງແຜນການ ແລະ ການລົງທຶນ ແລະ ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ.

## IV. ຜົນສັກສິດ

1. ຄໍາແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ**



**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ 1987 /ກຜທ

ນະຄອນຫຼວງວຽງຈັນ, ວັນທີ 27 ພະຈິກ 2020

# ຄຳແນະນຳ
# ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທຶນສົມທົບຂອງລັດຖະບານ ປະກອບເຂົ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017;

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ອອກຄຳແນະນຳ:**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ວາງອອກ ເພື່ອຜັນຂະຫຍາຍ ແລະ ແນະນຳຈັດຕັ້ງປະຕິບັດບາງມາດຕາຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015, ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019 ແລະ ນິຕິກຳອື່ນທີ່ຕິດພັນກັບວຽກງານຄຸ້ມຄອງ ແລະ ນຳໃຊ້ທຶນສົມທົບຂອງລັດຖະບານ ປະກອບເຂົ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ.

ເພື່ອໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງທີ່ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາໃນແຕ່ລະຂັ້ນ ໄດ້ນຳໃຊ້ເປັນບ່ອນອີງ ໃນການກຳນົດແຜນງານ ຫຼື ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ເປັນຕົ້ນແມ່ນ

ໂຄງການທີ່ຈັດຕັ້ງປະຕິບັດພາຍໃຕ້ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມດອກເບ້ຍຜ່ອນຜັນ, ທຶນຊ່ວຍເຫຼືອລ້າທາງດ້ານວິຊາການ ຈາກບັນດາຄູ່ຮ່ວມພັດທະນາ ທີ່ບໍ່ກວມເອົາການຊ່ວຍເຫຼືອຈາກລັດຖະບານ ສປ ຈີນ ແລະ ສສ. ຫວຽດນາມ.

## II. ເນື້ອໃນ

### 1. ປະເພດຂອງທຶນສົມທົບ

ປະເພດຂອງທຶນສົມທົບປະກອບມີ ທຶນສົມທົບຂອງລັດຖະບານ ແລະ ທຶນສົມທົບທີ່ເປັນຂອງພາກສ່ວນທົ່ວໄປ.

### 1.1 ທຶນສົມທົບຂອງລັດຖະບານ

ທຶນສົມທົບຂອງລັດຖະບານ ໝາຍເຖິງ ການປະກອບສ່ວນຂອງລັດຖະບານ ດ້ວຍການສົມທົບເປັນວັດຖຸປະກອນ ຫຼື ເປັນເງິນສົດ ເພື່ອປະກອບເຂົ້າໃນການກະກຽມ ແລະ ຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊຶ່ງຂະແໜງການທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ ເປັນຜູ້ດຳເນີນຂັ້ນຕອນການຂຶ້ນແຜນງົບປະມານ ເພື່ອສະເໜີລັດຖະບານພິຈາລະນາ ແລະ ຂໍການຮັບຮອງຈາກສະພາແຫ່ງຊາດ ຊຶ່ງມີລາຍລະອຽດດັ່ງນີ້:

#### 1.1.1 ທຶນສົມທົບທີ່ເປັນເງິນສົດ (In Cash)

- ທຶນສົມທົບທີ່ຄິດໄລ່ເປັນຄ່າຊົດເຊີຍການຍົກຍ້າຍປະຊາຊົນ ຫຼື ທີ່ດິນຂອງປະຊາຊົນ ທີ່ຖືກຜົນກະທົບຈາກໂຄງການ, ຊັບສິນທີ່ເປັນເງິນສົດ, ພັນທະບັດ, ຮຸ້ນ ແລະ ລາຍຈ່າຍອື່ນໆ ທີ່ເປັນພັນທະຂອງຝ່າຍລັດຖະບານ ຕ້ອງໄດ້ປະກອບສ່ວນເຂົ້າໃນໂຄງການ ຊກພ ຕາມການຕົກລົງກັບຜູ້ໃຫ້ທຶນ, ທຶນສົມທົບດັ່ງກ່າວຕ້ອງນອນຢູ່ໃນແຜນງົບປະມານແຫ່ງລັດ ແລະ ຜ່ານການຮັບຮອງຈາກສະພາແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການ.

- ທຶນສົມທົບທີ່ຄິດໄລ່ໃນຮູບແບບຈິດຮັບ-ຈິດຈ່າຍ ເຊັ່ນ: ການປະກອບສ່ວນຍົກເວັ້ນພາສີອາກອນນຳເຂົ້າວັດຖຸປະກອນຕ່າງໆ, ການປະກອບສ່ວນຍົກເວັ້ນພາສີອາກອນລາຍໄດ້ ແລະ ອາກອນເງິນເດືອນຂອງພະນັກງານ ແລະ ບໍລິສັດທີ່ປຶກສາຕ່າງໆເປັນຕົ້ນ ໂດຍອີງຕາມສັນຍາຂອງແຜນງານ ຫຼື ໂຄງການ ທີ່ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໂຄງການ.

#### 1.1.2 ທຶນສົມທົບທີ່ເປັນຄ່າພາສີ-ອາກອນ (Tax, duties and other fees)

ທຶນສົມທົບທີ່ເປັນຄ່າພາສີ-ອາກອນປະກອບມີ: ຄ່າພາສີ-ອາກອນການນຳເຂົ້າວັດຖຸປະກອນຕ່າງໆ ເພື່ອມາຮັບໃຊ້ໂຄງການທີ່ນຳໃຊ້ທຶນ ຊກພ, ອາກອນທາງກົງ-ທາງອ້ອມ, ຄ່າທຳນຽມຕ່າງໆ ຕາມພັນທະທີ່ລະບຸໃນສັນຍາເງິນກູ້ ແລະ ຊ່ວຍເຫຼືອລ້າ ເຊິ່ງຂະແໜງການກ່ຽວຂ້ອງຕ້ອງປະສານສົມທົບກັບກະຊວງການເງິນ ໃນການໄລ່ລຽງ ກ່ອນການຂຶ້ນແຜນທຶນສົມທົບດັ່ງກ່າວ.

#### 1.1.3 ທຶນສົມທົບທີ່ບໍ່ເປັນເງິນສົດ (In Kind)

ທຶນສົມທົບທີ່ບໍ່ເປັນເງິນສົດແມ່ນ ການປະກອບສ່ວນຂອງລັດຖະບານ ທີ່ນອນຢູ່ໃນຄັງຊັບສິນ ແລະ ງົບປະມານແຫ່ງລັດ ຊຶ່ງປະກອບມີ: ຊັບສິນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເປັນຕົ້ນແມ່ນ ທີ່ດິນ, ອາຄານ,

ສິ່ງກໍ່ສ້າງ, ຊັບສິນທາງປັນຍາ ແລະ ບຸກຄະລາກອນ, ຄ່າບໍລິຫານ ອື່ນໆ ເຊັ່ນ: ຄ່າເງິນເດືອນພະນັກງານລັດ, ຄ່ານໍ້າ, ຄ່າໄຟຟ້າ ຕາມພັນທະໃນສັນຍາ ແລະ ການຕົກລົງຮ່ວມກັນກັບຜູ້ໃຫ້ທຶນ ການປະກອບສ່ວນດັ່ງກ່າວຕ້ອງມີບັນຊີຕິດຕາມ, ຄິດໄລ່ ແລະ ສັງລວມເປັນມູນຄ່າຕົວຈິງ ເພື່ອສະຫຼຸບລາຍງານ ແລະ ແຈ້ງໃຫ້ຜູ້ໃຫ້ທຶນຊາບ.

**1.1.4 ທຶນສົມທົບທີ່ເປັນໂຄງການສົມທົບຂອງລັດຖະບານ (Public Investment Project)**

ທຶນສົມທົບທີ່ເປັນໂຄງການສົມທົບຂອງລັດຖະບານ ແມ່ນບັນດາໂຄງການທີ່ລັດຖະບານຈັດຕັ້ງປະຕິບັດ ຄຽງຄູ່ ຫຼື ເສີມໃສ່ ໂດຍນຳໃຊ້ງົບປະມານຂອງລັດ ຫຼື ບ້ວງທຶນອື່ນໆ, ເຊິ່ງມີຈຸດປະສົງເພື່ອອຳນວຍຄວາມສະດວກ ແລະ ເຊື່ອມຈອດໂຄງການ ຊກຜ, ແຕ່ຕ້ອງມີການປຶກສາຫາລື ແລະ ມີການຕົກລົງເຫັນດີລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ ຊກຜ, ໂດຍຈັດຕັ້ງປະຕິບັດອີງຕາມພັນທະ, ສັນຍາ ແລະ ເງື່ອນໄຂທີ່ໄດ້ຕົກລົງກັບຜູ້ໃຫ້ທຶນ ຫຼື ຄູ່ຮ່ວມພັດທະນາ ຕົວຢ່າງ: ຜູ້ໃຫ້ທຶນ ຫຼື ຄູ່ຮ່ວມພັດທະນາ ຕົກລົງຊ່ວຍເຫຼືອກໍ່ສ້າງໂຮງໝໍຄົບວົງຈອນເພື່ອພັດທະນາໃນຂົງເຂດຊົນນະບົດໃດໜຶ່ງ ແລະ ໃນນັ້ນລັດຖະບານຈະຕ້ອງໄດ້ສົມທົບເປັນໂຄງການລົງທຶນຂອງລັດໃນຮູບແບບການກໍ່ສ້າງ ຫຼື ຂະຫຍາຍເສັ້ນທາງ ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງໂຮງໝໍດັ່ງກ່າວ; ທຶນສົມທົບດັ່ງກ່າວຕ້ອງມີການຮັບຮູ້ ແລະ ຈັດເຂົ້າໃນແຜນການລົງທຶນປົກກະຕິຂອງຂະແໜງການທີ່ກ່ຽວຂ້ອງ, ເຊິ່ງຈະບໍ່ໄດ້ຄິດໄລ່ເພື່ອຂຶ້ນແຜນທຶນສົມທົບໃນເບື້ອງໂຄງການ ຊກຜ ແຕ່ຈະບັນທຶກເປັນການສົມທົບໂຄງການ ຊກຜ.

**1.2 ທຶນສົມທົບທີ່ເປັນຂອງພາກສ່ວນທົ່ວໄປ**

ທຶນສົມທົບທີ່ເປັນຂອງພາກສ່ວນທົ່ວໄປ ປະກອບມີ: ທຶນສົມທົບທີ່ເປັນຂອງປະຊາຊົນ ແລະ ພາກສ່ວນເອກະຊົນສົມທົບ ( Communitiess and privates Inclusiveness )

**1.2.1 ທຶນສົມທົບທີ່ເປັນຂອງປະຊາຊົນ** ແມ່ນໂຄງການທີ່ມີຜົນກະທົບຕໍ່ຊັບສິນທີ່ເປັນກຳມະສິດຂອງປະຊາຊົນ ແລະ ປະຊາຊົນເຫັນດີເປັນເອກະພາບ ສົມທົບຊ່ວຍເຫຼືອເຂົ້າໃນໂຄງການດັ່ງກ່າວ ເຊັ່ນ: ການປະກອບສ່ວນທາງວັດຖຸປະກອນ, ເງິນສົດ, ກຳລັງແຮງງານ, ເນື້ອທີ່ດິນບ້ານ, ໄຮ່ນາ-ຮົ້ວສວນ, ຕົ້ນໄມ້ ແລະ ສັດລ້ຽງຕ່າງໆ ທີ່ເປັນກຳມະສິດຂອງປະຊາຊົນມອບເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຊກຜ ເຊິ່ງທຶນສົມທົບດັ່ງກ່າວຈະບໍ່ຄິດໄລ່ເຂົ້າໃນແຜນການ ແຕ່ຈະໄລ່ເປັນມູນຄ່າຕາມການປະກອບສ່ວນຕົວຈິງ ເພື່ອຈັດເຂົ້າເປັນທຶນສົມທົບ ແລະ ແຈ້ງໃຫ້ຜູ້ໃຫ້ທຶນຊາບ.

**1.2.2 ທຶນສົມທົບທີ່ເປັນຂອງພາກສ່ວນເອກະຊົນ** ແມ່ນພາກສ່ວນເອກະຊົນຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ ໄດ້ປະກອບສ່ວນທາງດ້ານວັດຖຸປະກອນ, ເງິນສົດ ຫຼື ປັດໃຈອື່ນໃນບ້ວງງົບປະມານຂອງຕົນເອງທີ່ຮັບຜິດຊອບ ມອບເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຊກຜ ເຊິ່ງທຶນສົມທົບດັ່ງກ່າວ ຈະບໍ່ຄິດໄລ່ເຂົ້າໃນແຜນການ ແຕ່ຈະຄິດໄລ່ເປັນມູນຄ່າຕາມການປະກອບສ່ວນຕົວຈິງ ເພື່ອຈັດເຂົ້າເປັນທຶນສົມທົບ ແລະ ແຈ້ງໃຫ້ຜູ້ໃຫ້ທຶນຊາບ.

## 2. ໜ້າທີ່ຮັບຜິດຊອບຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ

### 2.1 ໜ້າທີ່ຮັບຜິດຊອບຂອງກະຊວງ ແຜນການ ແລະ ການລົງທຶນ

ໜ້າທີ່ຮັບຜິດຊອບ ຂອງກະຊວງ ແຜນການ ແລະ ການລົງທຶນ ແມ່ນຖືກຈັດຕັ້ງປະຕິບັດ ໂດຍແບ່ງໄປຕາມ ພາລະບົດບາດ ແລະ ໜ້າທີ່ຂອງບັນດາກົມທີ່ກ່ຽວຂ້ອງ ດັ່ງນີ້:

### 2.1.1 ກົມຮ່ວມມືສາກົນ

- ສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງເພື່ອມີສ່ວນຮ່ວມໃນຂະບວນການຄົ້ນຄວ້າທຸກຂັ້ນຕອນການກຳນົດທຶນສົມທົບ;

- ຄົ້ນຄວ້າ ແລະ ຢັ້ງຢືນຄວາມຖືກຕ້ອງຕາມເນື້ອໃນສັນຍາ ແຜນງານ ຫຼື ໂຄງການ ຊກພ ພ້ອມທັງປະເມີນ ຕິດຕາມ ແລະ ກວດກາການນຳໃຊ້ທຶນສົມທົບຂອງລັດຖະບານຖືກຕ້ອງ ແລະ ເປັນໄປຕາມແຜນ ແລະ ຈຸດປະສົງຂອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ;

- ຄົ້ນຄ້ວາ ແລະ ສັງລວມແຜນຄວາມຕ້ອງການທຶນສົມທົບປະຈຳປີ, ໄລຍະກາງ (3 ປີ) ແລະ ໄລຍະຍາວ (5 ປີ) ເພື່ອໃຫ້ສອດຄ່ອງກັບແຜນງົບປະມານໄລຍະກາງ ແລະ ໄລຍະຍາວຂອງລັດຖະບານ;

- ຄົ້ນຄວ້າ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການຂຶ້ນແຜນທຶນສົມທົບ ແລ້ວນຳສົ່ງຕໍ່ໄປຍັງກົມປະເມີນຜົນ ແລະ ກົມແຜນການ, ກະຊວງແຜນການ ແລະ ລົງທຶນ ເພື່ອປະກອບເຂົ້າໃນແຜນງົບປະມານຂອງລັດຖະບານ ເພື່ອລາຍງານໃຫ້ລັດຖະບານອະນຸມັດ ແລະ ສະພາແຫ່ງຊາດຮັບຮອງ;

- ຄົ້ນຄ້ວາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງທຶນສົມທົບທີ່ນອນຢູ່ໃນບ້ວງຈີດຮັບ-ຈີດຈ່າຍ ໃນແຕ່ລະປີ ແລ້ວສົ່ງໃຫ້ກະຊວງການເງິນ ຄົ້ນຄ້ວາພິຈາລະນາໃນຂັ້ນຕໍ່ໄປ;

- ຄົ້ນຄ້ວາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການສະເໜີ ອວ່າຍ ຫຼື ດັດແກ້ທຶນສົມທົບໃນແຕ່ລະຄັ້ງໂດຍອີງຕາມການລົງຕິດຕາມ ແລະ ປະເມີນການນຳໃຊ້ທຶນສົມທົບຢ່າງຖືກຕ້ອງຕາມລະບຽບຫຼັກການ ແລະ ຢັ້ງຢືນໃຫ້ພາກສ່ວນກ່ຽວຂ້ອງບັນຈຸເຂົ້າແຜນທຶນສົມທົບບ້ວງດັດແກ້ ຫຼື ອວ່າຍທຶນສົມທົບ ເພື່ອສະເໜີສະພາແຫ່ງຊາດຮັບຮອງ.

### 2.1.2 ກົມແຜນການ

- ສັງລວມ ແລະ ບັນຈຸທຶນສົມທົບເຂົ້າໃນແຜນສາລະບານປະຈຳປີທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກກົມຮ່ວມມືສາກົນ;

- ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ນຳໃຊ້ທຶນສົມທົບຂອງລັດຖະບານ ທີ່ຕິດພັນກັບແຜນງານ ຫຼື ໂຄງການ ຊກພ;

- ຮັບຮອງເອົາການຈັດສັນທຶນສົມທົບຂອງລັດຖະບານ ທີ່ປະກອບເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ເປັນບ້ວງງົບປະມານບຸລິມະສິດຂອງລັດຖະບານ ໃຫ້ພຽງພໍຕາມການຢັ້ງຢືນຂອງກົມຮ່ວມມືສາກົນ;

### 2.1.3 ກົມປະເມີນຜົນ

- ປະເມີນໂຄງການທີ່ເປັນປະເພດໂຄງການສົມທົບທຶນຂອງລັດຖະບານ ທີ່ປະກອບເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ;

- ແຈ້ງຜົນການປະເມີນ ແລະ ອອກໃບຢັ້ງຢືນຜົນການປະເມີນແຜນງານ ຫຼື ໂຄງການສົມທົບທຶນຂອງລັດຖະບານໃນແຕ່ລະໄລຍະ;

- ມີສ່ວນຮ່ວມ ໃນການຄຸ້ມຄອງການນຳໃຊ້ທຶນສະເພາະໂຄງການສົມທົບທຶນຂອງລັດຖະບານ;

- ເຂົ້າຮ່ວມແຕ່ຫົວທີ (ກ່ອນລິເລີ່ມໂຄງການ) ໃນການພິຈາລະນາທຶນສົມທົບຂອງລັດຖະບານປະກອບເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ໂດຍບໍ່ຈຳເປັນຕ້ອງປະເມີນທຶນສົມທົບ.

**2.2 ໜ້າທີ່ຮັບຜິດຊອບຂອງກະຊວງການເງິນ**

ກະຊວງການເງິນ ມີໜ້າທີ່ຮັບຜິດຊອບ ດັ່ງນີ້:

- ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ນຳໃຊ້ທຶນຊ່ວຍເຫຼືອຂອງຕ່າງປະເທດໃນໂຄງການ ຊກພ;

- ມີສ່ວນຮ່ວມໃນການປະເມີນຊັບສິນຕ່າງໆຂອງໂຄງການ ຫຼື ແຜນງານເພື່ອຕີມູນຄ່າເປັນທຶນສົມທົບຂອງລັດຖະບານ;

- ປຶກສາຫາລື ແລະ ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດສັນເພດານລວມຂອງງົບປະມານຂອງລັດຖະບານເຂົ້າໃນແຜນງົບປະມານປະຈຳປີ ໂດຍອີງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;

- ພາກສ່ວນສ່ວຍສາອາກອນ ສົມທົບກັບພາກສ່ວນກ່ຽວຂ້ອງໃນການຄິດໄລ່ພັນທະອາກອນຕ່າງໆ;

- ພາກສ່ວນຄຸ້ມຄອງຊັບສິນຂອງລັດ ສົມທົບກັບພາກສ່ວນກ່ຽວຂ້ອງໃນການປະເມີນ ແລະ ຕີລາຄາມູນຄ່າຊັບສິນຕ່າງໆ ໃນໂຄງການທີ່ຈະໃຊ້ເປັນທຶນສົມທົບທີ່ບໍ່ເປັນເງິນສົດ.

**2.3 ໜ້າທີ່ຮັບຜິດຊອບຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງອື່ນ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງອື່ນ ມີໜ້າທີ່ຮັບຜິດຊອບ ດັ່ງນີ້:

- ສ້າງແຜນທຶນສົມທົບຂອງລັດຖະບານໃຫ້ແກ່ແຜນງານ ຫຼື ໂຄງການ ຊກພ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຕາມສັນຍາທີ່ເຊັນກັບຄູ່ຮ່ວມພັດທະນາແລ້ວ ສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ເພື່ອຈັດເຂົ້າແຜນງົບປະມານພາຍໃນແຕ່ລະປີ ພ້ອມທັງປະສານສົມທົບກັບທ້ອງຖິ່ນໃນການຂຶ້ນແຜນທຶນສົມທົບຂອງລັດຖະບານ ສຳລັບແຜນງານ ຫຼື ໂຄງການ ຊກພ ທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ;

- ເປັນເຈົ້າການສະຫຼຸບ, ສັງລວມ ການນຳໃຊ້ທຶນສົມທົບຂອງລັດຖະບານຕົວຈິງໃນແຕ່ລະໄຕມາດ ແລະ ແຕ່ລະປີທີ່ກະຊວງ ແລະ ອົງການລັດທຽບເທົ່າກະຊວງໄດ້ຮັບອະນຸມັດການນຳໃຊ້ທຶນສົມທົບຂອງລັດຖະບານ ແລ້ວລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຢ່າງເປັນປົກກະຕິ.

**3. ໜ້າທີ່ຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ຮັບຜິດຊອບ ດັ່ງນີ້:

- ສ້າງແຜນທຶນສົມທົບຂອງລັດຖະບານໃຫ້ແກ່ແຜນງານ ຫຼື ໂຄງການ ຊກພ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ຕາມສັນຍາທີ່ເຊັນກັບຄູ່ຮ່ວມພັດທະນາ ແລ້ວສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຈັດເຂົ້າໃນແຜນງົບປະມານພາຍໃນຂອງແຕ່ລະປີ ພ້ອມທັງປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ຕາມສາຍຕັ້ງຂອງຕົນ ໃນການຂຶ້ນແຜນທຶນສົມທົບຂອງລັດຖະບານ ສຳລັບແຜນງານ ຫຼື ໂຄງການ ທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ;

- ເປັນເຈົ້າການສະຫຼຸບ, ສັງລວມ, ປະເມີນ ແລະ ຕິດຕາມການນຳໃຊ້ທຶນສົມທົບຂອງລັດຖະບານຕົວຈິງໃນແຕ່ລະໄຕມາດ ແລະ ແຕ່ລະປີທີ່ແຂວງໄດ້ຮັບໂດຍກົງ ຈາກການອະນຸມັດນຳໃຊ້ທຶນສົມທົບຂອງລັດຖະບານ ແລ້ວລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ເພື່ອຊາບ ແລະ ຕິດຕາມ.

## 4. ໄລຍະເວລາການຂຶ້ນແຜນທຶນສົມທົບຂອງລັດຖະບານ

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາຈະຕ້ອງໄດ້ກະກຽມຂຶ້ນແຜນທຶນສົມທົບຂອງລັດຖະບານ ແລະ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ຄົ້ນຄວ້າ ແລະ ຢັ້ງຢືນ ກ່ອນວັນທີ 15 ພຶດສະພາ ຂອງທຸກປີໃນໄລຍະການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ຊກພ.

ການຂຶ້ນແຜນທຶນສົມທົບໄດ້ແບ່ງອອກເປັນສອງໄລຍະ ຄື: 1). ການຂຶ້ນແຜນທຶນສົມທົບຂອງລັດຖະບານ ສໍາລັບແຜນງານ ຫຼື ໂຄງການໃໝ່ (ໄລຍະການກະກຽມແຜນງານໂຄງການ); 2). ການຂຶ້ນແຜນທຶນສົມທົບຂອງລັດຖະບານປະຈໍາປີ ສໍາລັບແຜນງານ ຫຼື ໂຄງການ ທີ່ກໍາລັງຈັດຕັ້ງປະຕິບັດ.

ການຂຶ້ນແຜນທຶນສົມທົບຂອງລັດຖະບານ ໃຫ້ຖືສະກຸນເງິນກີບເປັນຫຼັກ ແລະ ອາດສົມທຽບເປັນສະກຸນເງິນໂດລາສະຫະລັດ ຫຼື ສະກຸນເງິນອື່ນ ຕາມເງື່ອນໄຂຂອງສັນຍາ ແລະ ອັດຕາແລກປ່ຽນທີ່ລະບຽບການກໍານົດ.

## 5. ຂັ້ນຕອນການຂຶ້ນແຜນທຶນສົມທົບຂອງລັດຖະບານ

### 5.1 ຂັ້ນກະຊວງ

- ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ຊກພ ໂດຍກົງ ເປັນຜູ້ຂຶ້ນແຜນທຶນສົມທົບຂອງລັດຖະບານໃນໄລຍະການຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການ ເຊິ່ງໃນນັ້ນໃຫ້ຂຶ້ນແຜນລວມ ແລະ ແຜນການນໍາໃຊ້ທຶນສົມທົບໃນແຕ່ລະປີ ຢ່າງລະອຽດ;
- ສໍາລັບທຶນສົມທົບຂອງ ແຜນງານ ຫຼື ໂຄງການທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ ສປ ຈີນ ແລະ ສສ ຫວຽດນາມ ພາກສ່ວນກ່ຽວຂ້ອງຕ້ອງສະເໜີຂໍອະນຸມັດໂດຍຜ່ານຫ້ອງການຄະນະກໍາມະການຮ່ວມມືລາວ-ຫວຽດນາມ ແລະ ຫ້ອງການຄະນະກໍາມະການຮ່ວມມື ລາວ-ຈີນ ເພື່ອຄົ້ນຄ້ວາ ຢັ້ງຢືນຄວາມຖືກຕ້ອງ ແລ້ວສົ່ງໃຫ້ກົມແຜນການສັງລວມເຂົ້າໃນແຜນ ແລະ ດໍາເນີນການໃນຂັ້ນຕໍ່ໄປ;
- ແຜນງານ ຫຼື ໂຄງການ ທີ່ຈັດຕັ້ງປະຕິບັດຮ່ວມກັນ ລະຫວ່າງບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນແມ່ນໃຫ້ສົມທົບກັນຢ່າງລະອຽດ ກັບຜູ້ຄຸ້ມຄອງ ແຜນງານ ຫຼື ໂຄງການ ໃຫ້ມີຄວາມເປັນເອກະພາບກັນ ແລ້ວໃຫ້ກະຊວງຜູ້ເປັນເຈົ້າຂອງແຜນງານ ຫຼື ໂຄງການ ຂຶ້ນແຜນທຶນສົມທົບໃນຂັ້ນກະຊວງ ເພື່ອສະເໜີມາຍັງພາກສ່ວນກ່ຽວຂ້ອງດໍາເນີນການອະນຸມັດ.

### 5.2 ຂັ້ນອົງການປົກຄອງທ້ອງຖິ່ນ

- ແຜນງານ ຫຼື ໂຄງການ ທີ່ຈັດຕັ້ງປະຕິບັດທີ່ຂັ້ນແຂວງເປັນຜູ້ຄຸ້ມຄອງ ແມ່ນໃຫ້ຂະແໜງການກ່ຽວຂ້ອງຂຶ້ນແຜນທຶນສົມທົບ ໂດຍຜ່ານພະແນກແຜນການ ແລະ ການລົງທຶນແຂວງ ເປັນຜູ້ຢັ້ງຢືນ ແລະ ຄົ້ນຄ້ວາ ນໍາສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ);
- ແຜນງານ ຫຼື ໂຄງການທີ່ຈັດຕັ້ງປະຕິບັດຮ່ວມກັນ ລະຫວ່າງ ບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ສົມທົບກັນຢ່າງລະອຽດກັບຜູ້ຄຸ້ມຄອງ ແຜນງານ ຫຼື ໂຄງການ ໃຫ້ມີຄວາມເປັນເອກະພາບກັນ ແລ້ວໃຫ້ອົງການປົກຄອງທ້ອງຖິ່ນທີ່ຈັດຕັ້ງປະຕິບັດໂຄງການ ຂຶ້ນແຜນທຶນສົມທົບໃນຂັ້ນແຂວງ ເພື່ອສະເໜີມາຍັງພາກສ່ວນກ່ຽວຂ້ອງດໍາເນີນການອະນຸມັດ.

## 6. ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງທຶນສົມທົບຂອງລັດຖະບານ

### 6.1 ການອະນຸມັດທຶນສົມທົບຂອງລັດຖະບານ

ໃນການອະນຸມັດທຶນສົມທົບຂອງລັດຖະບານ ຈະຕ້ອງໄດ້ປະສານສົມທົບກັບຫຼາຍພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄ້ວາ, ກວດກາຢັ້ງຢືນຄວາມຖືກຕ້ອງ ຕາມຈຸດປະສົງ, ເປົ້າໝາຍ, ກົດໝາຍ ແລະ ລະບຽບການການນຳໃຊ້ງົບປະມານຂອງລັດຖະບານ ຊຶ່ງຈະຕ້ອງໄດ້ສົມທົບກັບຫຼາຍພາກສ່ວນ ດັ່ງນີ້:

ໃນຂັ້ນຕອນທຳອິດ ຈະຕ້ອງໄດ້ຂຶ້ນແຜນລວມ ແລະ ແຜນປະຈຳປີຂອງການນຳໃຊ້ທຶນສົມທົບ ເພື່ອນຳສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ຢັ້ງຢືນຄວາມຖືກຕ້ອງ ແລະ ເອົາເຂົ້າແຜນງົບປະມານລວມຂອງລັດຖະບານ ແລ້ວສະເໜີສະພາແຫ່ງຊາດ ຮັບຮອງ. ພາຍຫຼັງທີ່ໄດ້ຮັບການອະນຸມັດ, ຜູ້ຄຸ້ມຄອງໂຄງການ ຫຼື ເຈົ້າຂອງໂຄງການ ຕ້ອງນຳສົ່ງເອກະສານໄປຫາກະຊວງແຜນການ ແລະ ການລົງທຶນ ເພື່ອດຳເນີນຂັ້ນຕອນຕໍ່ໄປ.

#### 6.1.1 ການອະນຸມັດທຶນສົມທົບຂອງລັດຖະບານໃນຮູບແບບເງິນສົດ

- ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ທີ່ເປັນຜູ້ຄຸ້ມຄອງໂຄງການ ຕ້ອງຍື່ນເອກະສານຫາກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄ້ວາ ແລະ ຢັ້ງຢືນຄວາມຖືກຕ້ອງ ແລະ ດຳເນີນຕາມຂັ້ນຕອນຕໍ່ໄປ;

- ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ເປັນຜູ້ຄົ້ນຄ້ວາ ແລະ ກວດກາຢັ້ງຢືນຄວາມຕ້ອງການ, ຄວາມຈຳເປັນອັນແທ້ຈິງ ແລະ ຮູບແບບການນຳໃຊ້ທຶນສົມທົບຂອງລັດຖະບານ ໃຫ້ສອດຄ່ອງຕາມຈຸດປະສົງ, ເປົ້າໝາຍ ແລະ ສັນຍາຂອງແຜນງານ ຫຼື ໂຄງການ ຊກພ;

- ກະຊວງແຜນການ ແລະ ການລົງທຶນ (ກົມແຜນການ) ເປັນຜູ້ສັງລວມບັນດາໂຄງການ ແລະ ທຶນສົມທົບຂອງລັດຖະບານ ທີ່ຜ່ານການຄົ້ນຄວ້າ ແລະ ຢັ້ງຢືນຢ່າງຖືກຕ້ອງແລ້ວ ສະເໜີໄປຍັງກະຊວງການເງິນ ເພື່ອສັງລວມເອົາເຂົ້າແຜນງົບປະມານລາຍຈ່າຍຂອງລັດຖະບານ ແລ້ວສະເໜີໃຫ້ສະພາແຫ່ງຊາດຮອງຮັບ;

- ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບ ກະຊວງການເງິນ ກ່ຽວກັບການຈັດສັນທຶນສົມທົບຂອງລັດຖະບານ ເຂົ້າໃນແຜນລວມງົບປະມານປະຈຳປີຂອງລັດຖະບານ ເພື່ອສະເໜີໃຫ້ສະພາແຫ່ງຊາດຮັບຮອງ;

#### 6.1.2 ການອະນຸມັດທຶນສົມທົບຂອງລັດຖະບານໃນຮູບແບບຈົດຮັບ-ຈົດຈ່າຍ

- ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ທີ່ມີຈຸດປະສົງນຳໃຊ້ທຶນສົມທົບຂອງລັດຖະບານໃນຮູບແບບຈົດຮັບ-ຈົດຈ່າຍ ຕ້ອງໄດ້ຂຶ້ນແຜນລວມຂອງຄວາມຕ້ອງການນຳໃຊ້ທຶນສົມທົບດັ່ງກ່າວ ເພື່ອນຳສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ຢັ້ງຢືນຄວາມຖືກຕ້ອງແລ້ວ ສົ່ງໃຫ້ກະຊວງການເງິນ ເພື່ອປະຕິບັດຕາມຂັ້ນຕອນຕໍ່ໄປ;

- ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ທີ່ເປັນຜູ້ຄຸ້ມຄອງໂຄງການ ເຮັດໜັງສືສະເໜີມາຍັງ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ເພື່ອຄົ້ນຄ້ວາ ແລະ ຢັ້ງຢືນຄວາມຖືກຕ້ອງ ແລະ ດຳເນີນຕາມຂັ້ນຕອນຕໍ່ໄປ;

- ກະຊວງແຜນການ ແລະ ການລົງທຶນ (ກົມແຜນການ) ເປັນຜູ້ສັງລວມບັນດາໂຄງການ ແລະ ທຶນສົມທົບຂອງລັດຖະບານ ທີ່ຜ່ານການຄົ້ນຄວ້າ ແລະ ຢັ້ງຢືນຢ່າງຖືກຕ້ອງແລ້ວສະເໜີໄປຍັງກະຊວງ ການເງິນ ເພື່ອສັງລວມເອົາເຂົ້າແຜນງົບປະມານລາຍຈ່າຍຂອງລັດຖະບານ ແລ້ວສະເໜີໃຫ້ສະພາແຫ່ງຊາດຮອງຮັບ;

- ກະຊວງການເງິນ ເປັນເຈົ້າການສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ສັງລວມເອົາຄວາມຕ້ອງການແຜນການນຳໃຊ້ທຶນສົມທົບຂອງລັດຖະບານ ໃນບ້ວງຈິດຮັບ-ຈິດຈ່າຍຈັດສັນເຂົ້າແຜນລວມງົບປະມານປະຈຳປີຂອງລັດຖະບານ ນຳສະເໜີໃຫ້ສະພາແຫ່ງຊາດຮັບຮອງ ເພື່ອຊຳລະສະສາງ ແລະ ລຶບລ້າງໃນບ້ວງທຶນສົມທົບຂອງລັດຖະບານຕາມຄວາມຖືກຕ້ອງຂອງລະບຽບຫຼັກການ;

#### 6.1.3 ການອະນຸມັດທຶນສົມທົບຂອງລັດຖະບານໃນຮູບແບບທີ່ບໍ່ເປັນເງິນສົດ

ສຳລັບການສະເໜີຂຶ້ນແຜນບ້ວງທຶນສົມທົບທີ່ບໍ່ເປັນເງິນສົດ ແມ່ນໃຫ້ແຈ້ງແຜນທຶນສົມທົບຕາມການຕີລາຄາໄລ່ລຽງ ຕໍ່ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ເພື່ອພິຈາລະນາຄົ້ນຄ້ວາ ແລະ ຢັ້ງຢືນ ແຕ່ຈະບໍ່ຂຶ້ນແຜນເພື່ອຈັດສັນເຂົ້າໃນເພດານງົບປະມານໃນບ້ວງທຶນສົມທົບໂຄງການ ຊກພ. ເມື່ອສຳເລັດການຈັດຕັ້ງປະຕິບັດ ແລະ ມີການສົມທົບຕົວຈິງແລ້ວ ໃຫ້ຂະແໜງການທີ່ເປັນເຈົ້າຂອງໂຄງການນັ້ນ ສັງລວມ ແລະ ລາຍງານຕໍ່ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ຜູ້ໃຫ້ທຶນ ຕາມລະບຽບການ.

### 6.2 ການຕິດຕາມ ແລະ ການລາຍງານ

ການຕິດຕາມ ແລະ ລາຍງານ ການຈັດຕັ້ງປະຕິບັດການນຳໃຊ້ທຶນສົມທົບຂອງລັດຖະບານ ມີດັ່ງນີ້:

- ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດກິດຈະກຳ, ການເບີກຈ່າຍຕົວຈິງ ແລະ ແຜນເບີກຈ່າຍງົບປະມານ ລວມທັງການນຳໃຊ້ທຶນສົມທົບ ສຳລັບແຜນງານ ຫຼື ໂຄງການ ຊກພ ທີ່ນອນໃນ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນຂອງຕົນ ລາຍງານໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອໃຫ້ສາມາດຕິດຕາມ ແລະ ສັງລວມຄວາມຄືບໜ້າ ລວມທັງສະເໜີການຈັດສັນທຶນສົມທົບສຳລັບແຜນງານ ຫຼື ໂຄງການ ກ່ອນວັນທີ 15 ພຶດສະພາ ຂອງທຸກປີ;

- ພາຍຫຼັງທີ່ທຶນສົມທົບໄດ້ຮັບອະນຸມັດແລ້ວ ແຕ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ຜູ້ຄຸ້ມຄອງແຜນງານ ຫຼື ໂຄງການຕ້ອງນຳສົ່ງທຶນສົມທົບດັ່ງກາວໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອດັດສົມຄືນໃໝ່;

- ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຈະຕ້ອງລາຍງານຜົນຄວາມຄືບໜ້າການຈັດຕັ້ງປະຕິບັດທຶນສົມທົບໃຫ້ແກ່ຄະນະນຳຂອງຕົນ ແລະ ກະຊວງແຜນການ ແລະ ການລົງທຶນຮັບຊາບ ໃນທຸກໆ ໄຕມາດ, ປະຈຳຫົກເດືອນ ແລະ ປະຈຳປີ;

- ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບກະຊວງການເງິນ ແລະ ຄູ່ຮ່ວມພັດທະນາ ເພື່ອລົງຕິດຕາມ, ກວດກາ, ປະເມີນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ຊກພ ທີ່ນຳໃຊ້ທຶນສົມທົບຂອງລັດຖະບານ ແລະ ລາຍງານໃຫ້ລັດຖະບານໃນແຕ່ລະໄລຍະ;

### 6.3 ການປະເມີນການນຳໃຊ້ທຶນສົມທົບຂອງລັດຖະບານ

ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການຄົ້ນຄ້ວາ ແລະ ປະເມີນຢ່າງລະອຽດຕໍ່ກັບຂັ້ນ

ຕອນຂະບວນການສະເໜີຂຶ້ນແຜນທຶນສົມທົບຂອງລັດຖະບານ ພ້ອມທັງເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ ຄົ້ນຄ້ວາ ຕໍ່ກັບບັນດາກິດຈະກໍາ, ແຜນງານ ຫຼື ໂຄງການ ດັ່ງກ່າວ ສອດຄ່ອງກັບເປົ້າໝາຍ, ຈຸດປະສົງ ແລະ ລະບຽບການນໍາໃຊ້ທຶນສົມທົບຂອງລັດຖະບານ ໂດຍອີງໃສ່ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ເປັນຫຼັກ. ເຊິ່ງໄດ້ກໍານົດຂັ້ນຕອນການປະເມີນການນໍາໃຊ້ທຶນສົມທົບ ຂອງລັດຖະບານດັ່ງລຸ່ມນີ້:

- ເປັນແຜນງານ ຫຼື ໂຄງການ ທີ່ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

- ສອດຄ່ອງກັບດໍາລັດ ວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ, ຍຸດທະສາດການຄຸ້ມຄອງ ແລະ ລະດົມທຶນ ຊກພ ແລະ ຂອບການຮ່ວມມືກັບຄູ່ຮ່ວມພັດທະນາ;

- ການປະເມີນການຂຶ້ນແຜນທຶນສົມທົບຂອງລັດຖະບານ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈະຕ້ອງໄດ້ຄົ້ນຄ້ວາລະອຽດ ເພື່ອເຈລະຈາກັບຄູ່ຮ່ວມພັດທະນາ ກ່ຽວກັບການປະກອບທຶນສົມທົບ ບົນພື້ນຖານງົບປະມານຂອງລັດຖະບານມີຄວາມຈໍາກັດ, ຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງການນໍາໃຊ້ທຶນ ຊກພ;

- ການປະເມີນການຂຶ້ນແຜນທຶນສົມທົບຂອງລັດຖະບານ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈະຕ້ອງໄດ້ກໍານົດໄວ້ ກ່ຽວກັບຮູບແບບ ແລະ ເປົ້າໝາຍການນໍາໃຊ້ທີ່ໄດ້ກໍານົດໄວ້ໃນປະເພດຂອງທຶນສົມທົບຂອງລັດຖະບານ ເຊັ່ນ:

**ກ.** ທຶນສົມທົບຂອງລັດຖະບານນໍາໃຊ້ເຂົ້າໃນວຽກງານ ແຜນງານ ຫຼື ໂຄງການກໍ່ສ້າງພື້ນຖານໂຄງລ່າງເສດຖະກິດເຊິ່ງຈະຕ້ອງມີ: 1). ການເວນຄືນທີ່ດິນໃຫ້ແກ່ປະຊາຊົນ, 2). ການຍົກຍ້າຍສິ່ງກີດຂວາງ, 3). ການຊົດເຊີຍສິ່ງເສຍຫາຍ ແລະ ຜົນກະທົບຮອບດ້ານ ຈາກການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການທີ່ມີຕໍ່ປະຊາຊົນ, 4). ການຊົດເຊີຍຜົນກະທົບທາງດ້ານສິ່ງແວດລ້ອມ, 5). ການຊົດເຊີຍຜົນກະທົບທາງດ້ານລາຍຮັບຂອງປະຊາຊົນ ແລະ ອື່ນໆ;

**ຂ.** ທຶນສົມທົບຂອງລັດຖະບານທີ່ນໍາໃຊ້ເຂົ້າໃນວຽກງານບໍລິຫານ ຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ, ເຊິ່ງຂັ້ນຕອນການປະເມີນອະນຸມັດນໍາໃຊ້ທຶນສົມທົບຂອງລັດຖະບານເຂົ້າໃນບ້ວງການບໍລິຫານຄຸ້ມຄອງແຜນງານ ຫຼື ໂຄງການ ແມ່ນຈະຕ້ອງໄດ້ລົງເລິກຄົ້ນຄ້ວາ, ພິຈາລະນາເຖິງຄວາມຈໍາເປັນຢ່າງແທ້ຈິງໃນການຂໍອະນຸມັດນໍາໃຊ້ເງິນດັ່ງກ່າວ ເພື່ອຫຼີກລ້ຽງຜົນກະທົບຂອງງົບປະມານລັດຖະບານຂາດດຸນ. ເນື່ອງຈາກວ່າຄູ່ຮ່ວມພັດທະນາ ຫຼື ຜູ້ຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການກໍໄດ້ມີການກໍານົດແຜນການເງິນບ້ວງບໍລິຫານ ແລະ ຄຸ້ມຄອງໂຄງການ ຢ່າງລະອຽດແລ້ວ;

**ຄ.** ການສະເໜີທຶນສົມທົບຂອງລັດຖະບານ ຄິດໄລ່ເຂົ້າໃນແຜນຈິດຮັບ-ຈິດຈ່າຍ ຂອງງົບປະມານລັດຖະບານ ໂດຍຜ່ານການປະຕິບັດຕາມເງື່ອນໄຂຂອງສັນຍາໂຄງການ ໃນຫຼາຍຮູບການ ເຊັ່ນວ່າ: ການຍົກເວັ້ນທາງດ້ານພັນທະພາສີ-ອາກອນນໍາເຂົ້າຕ່າງໆ; ການຍົກເວັ້ນພາສີອາກອນເງິນເດືອນຂອງພະນັກງານຊ່ຽວຊານຕ່າງປະເທດ ແລະ ອື່ນໆ;

### 6.4 ການຄຸ້ມຄອງ ແລະ ການນໍາໃຊ້ທຶນສົມທົບຂອງລັດຖະບານ

ການສະເໜີຂຶ້ນແຜນທຶນສົມທົບຂອງລັດຖະບານ ຈະຕ້ອງໄດ້ອີງໃສ່ບົນພື້ນຖານຫຼັກການ ການຈັດສັນຂອງລັດຖະບານເປັນຫຼັກ ເພື່ອບໍ່ໃຫ້ເກີດຄວາມເສຍຫາຍ, ເກີດໜີ້ສິນຄຸ້ມເຄືອ ແລະ ກະທົບຕໍ່ງົບປະມານ

ແຫ່ງລັດເພາະສະນັ້ນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈະຕ້ອງໄດ້ເອົາໃຈໃສ່ຄົ້ນຄ້ວາລະອຽດ ຕໍ່ກັບສັນຍາແຜນງານ ຫຼື ໂຄງການ, ຄວາມຈຳເປັນຮີບດ່ວນອັນແທ້ຈິງ ແລະ ບູລິມະສິດຂອງແຜນງານ ຫຼື ໂຄງການທີ່ຈະຕ້ອງໄດ້ນຳໃຊ້ທຶນສົມທົບຂອງລັດຖະບານ ເຂົ້າໃນການຈັດຕັ້ງປະຕິບັດແຜນງການ ຫຼື ໂຄງການ ຊກພ ເຊິ່ງຈະຕ້ອງມີເງື່ອນໄຂ ແລະ ເປົ້າໝາຍການຄຸ້ມຄອງ ແລະ ການນຳໃຊ້ທຶນສົມທົບຂອງລັດຖະບານ ໂດຍປະຕິບັດຕາມຫຼັກການ ດັ່ງລຸ່ມນີ້:

- ເປັນແຜນງານ ຫຼື ໂຄງການ ທີ່ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

- ການສະເໜີຂໍຂຶ້ນແຜນທຶນສົມທົບຂອງລັດຖະບານ ຕ້ອງລວມສູນເປັນເອກະພາບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໂດຍຜ່ານປະຕູດຽວ ຄື: ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ສັງລວມເອົາເຂົ້າແຜນ, ຢັ້ງຢືນຄວາມຖືກຕ້ອງ ແລະ ສົມທົບກັບກະຊວງການເງິນ ເພື່ອເອົາເຂົ້າແຜນງົບປະມານແຫ່ງລັດ ແລະ ລາຍງານສະພາແຫ່ງຊາດເພື່ອຮັບຮອງ;

- ສອດຄ່ອງກັບດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ, ຍຸດທະສາດການຄຸ້ມຄອງ ແລະ ລະດົມທຶນ ຊກພ ແລະ ຂອບການຮ່ວມມືກັບຄູ່ຮ່ວມພັດທະນາ;

- ມີຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ ຫຼື ໂຄງການ;

- ນຳໃຊ້ທຶນສົມທົບຂອງລັດຖະບານໃຫ້ຖືກຕາມຈຸດປະສົງ, ເປົ້າໝາຍ, ມີປະສິດທິພາບ ແລະ ປະສິດທິຜົນສູງ;

- ເປັນແຜນງານ ຫຼື ໂຄງການ ທີ່ນອນຢູ່ໃນບັນຊີໂຄງການບູລິມະສິດທີ່ຮັບຮອງ ແລະ ສະເໜີໂດຍຂັ້ນກະຊວງ ແລະ ອົງການປົກຄອງທ້ອງຖິ່ນ;

- ການຄຸ້ມຄອງການເງິນບ້ວງທຶນສົມທົບຂອງລັດຖະບານ ພາຍໃຕ້ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ຫຼື ການຕົກລົງຂອງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ;

- ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

- ໃຫ້ຄວາມຮ່ວມມື ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ;

### 6.5 ລະບຽບການຂຶ້ນແຜນທຶນສົມທົບຂອງລັດຖະບານ

- ການສະເໜີຂໍອະນຸມັດທຶນສົມທົບຂອງລັດຖະບານ ສຳລັບຂັ້ນກະຊວງ ຕ້ອງເຊັນຢັ້ງຢືນໂດຍຜ່ານຂັ້ນຄະນະນຳກະຊວງຂອງຂະແໜງການ ທີ່ແຜນງານ ຫຼື ໂຄງການຈັດຕັ້ງປະຕິບັດຢູ່;

- ການສະໜີຂໍອະນຸມັດທຶນສົມທົບຂອງລັດຖະບານ ສຳລັບຂັ້ນອົງການປົກຄອງທ້ອງຖິ່ນ ຕ້ອງເຊັນຢັ້ງຢືນໂດຍຜ່ານຂັ້ນຄະນະນຳຂອງແຂວງ/ນະຄອນຫຼວງ ທີ່ແຜນງານ ຫຼື ໂຄງການຈັດຕັ້ງປະຕິບັດຢູ່;

- ການສະເໜີຂໍອະນຸມັດທຶນສົມທົບລັດຖະບານ ເພື່ອຢັ້ງຢືນ, ປະເມີນ ແລະ ເອົາເຂົ້າແຜນ ແມ່ນຕ້ອງສົ່ງເຖິງ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ກ່ອນວັນທີ 15 ພຶດສະພາ ຂອງແຕ່ລະປີ. ຖ້າຫາກວ່າພາກສ່ວນກ່ຽວຂ້ອງບໍ່ສາມາດສະເໜີພາຍໃນກຳນົດເວລາດັ່ງກ່າວ ຈະຕ້ອງສະເໜີໃນງວດປີຕໍ່ໄປ;

- ແຜນງານ ຫຼື ໂຄງການ ທີ່ຕ້ອງການທຶນສົມທົບຂອງລັດຖະບານ ແມ່ນຕ້ອງເປັນໂຄງການທີ່ໄດ້ຮັບການອະນຸມັດ (ປ້ອນຂໍ້ມູນ) ຜ່ານລະບົບຖານຂໍ້ມູນ ຊກພ ຫຼື www.ODA-MIS.gov.la ແລະ ມີລະຫັດໂຄງການຖືກຕ້ອງ. ຖ້າຫາກວ່າ ແຜນງານ ຫຼື ໂຄງການ ຍັງບໍ່ໄດ້ຜ່ານການອະນຸມັດໃນລະບົບຖານຂໍ້ມູນ ຊກພ ຢ່າງຖືກຕ້ອງ ແຜນງານ ຫຼື ໂຄງການ ດັ່ງກ່າວຈະບໍ່ສາມາດສະເໜີຂໍທຶນສົມທົບຈາກລັດຖະບານໄດ້.

### 6.6 ລະບຽບການປະກອບເອກະສານຂັດຕິດ ເພື່ອສະເໜີຂໍທຶນສົມທົບຂອງລັດຖະບານ

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈະຕ້ອງໄດ້ເອົາໃຈໃສ່ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງເພື່ອປະກອບເນື້ອໃນ ແລະ ເອກະສານຄັດຕິດຢ່າງຄົບຖ້ວນ ເພື່ອນຳສະເໜີຂໍຂຶ້ນແຜນທຶນສົມທົບຂອງລັດຖະບານ ເຊິ່ງປະກອບມີເອກະສານທີ່ສຳຄັນ ດັ່ງນີ້:

- ແບບຟອມການສະເໜີຂໍທຶນສົມທົບຂອງລັດຖະບານ, ແບບຟອມການສະເໜີຂໍທຶນສົມທົບຂອງລັດຖະບານບ້ວງຈິດຮັບ-ຈິດຈ່າຍ (ສາມາດປະສານເອົາແບບຢ່າງຈາກກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ຫຼື ສາມາດດາວໂລດໄດ້ທີ່ເວັບໄຊ້ຂອງລະບົບຖານຂໍ້ມູນ ຊກພ ຫຼື www.ODA-MIS.gov.la, ເວັບໄຊ້ຂອງໂຄງການໂຕະມົນ www.rtm.org.la ແລະ ເວັບໄຊ້ຂອງກະຊວງແຜນການ ແລະ ການລົງທຶນ www.mpi.gov.la);

- ສັນຍາແຜນງານ ຫຼື ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ;

- ແຈ້ງການອະນຸມັດຮັບເອົາແຜນງານ ຫຼື ໂຄງການ ຊກພ ໂດຍການສະເໜີຂອງ ກະຊວງແຜນການ ແລະ ການລົງທຶນ;

- ເອກະສານແຜນງານ ຫຼື ໂຄງການ ຊກພ ທີ່ຕິດພັນກັບການປະຕິບັດໂຄງການເງິນກູ້ຢືມເງື່ອນໄຂຜ່ອນຜັນ ທີ່ໄດ້ຮັບກະອະນຸມັດຈາກກະຊວງການເງິນ;

- ເອກະສານແຜນງານ ຫຼື ໂຄງການ ທີ່ຜ່ານອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ໄດ້ຮັບການອະນຸມັດຜ່ານກະຊວງການຕ່າງປະເທດ;

- ເອກະສານແຜນງານ ຫຼື ໂຄງການ ທີ່ຜ່ານອົງການຈັດຕັ້ງທາງສັງຄົມ ໄດ້ຮັບອະນຸມັດຜ່ານກະຊວງພາຍໃນ;

- ເອກະສານແຜນງານ ຫຼື ໂຄງການກູ້ຢືມເງື່ອນໄຂຜ່ອນຜັນທີ່ໄດ້ຮັບອະນຸມັດຜ່ານກະຊວງການເງິນ;

- ເອກະສານແຜນງານ ຫຼື ໂຄງການຊ່ວຍເຫຼືອລ້າ ລະຫວ່າງ ຜູ້ຈັດຕັ້ງປະຕິບັດ ແລະ ຜູ້ໃຫ້ທຶນ ທີ່ລັດຖະບານ ອະນຸມັດ;

- ເອກະສານການເງິນ, ເອກະສານອາກອນ, ເອກະສານລະບຽບຫຼັກການຕ່າງໆ ທີ່ຕິດພັນກັບການຢັ້ງຢືນຂໍທຶນສົມທົບຂອງລັດຖະບານສຳລັບບ້ວງຈິດຮັບ-ຈິດຈ່າຍ;

- ແບບຟອມຂໍ້ມູນໂຄງການ ແບບກະທັດຫັດ (SPIS), ຖ້າມີ;

- ເອກະສານທີ່ກ່ຽວຂ້ອງກັບການຄຸ້ມຄອງບໍລິຫານໂຄງການ ມີດັ່ງນີ້:

**ກ.** ຄູ່ມືການຄຸ້ມຄອງບໍລິຫານໂຄງການ ຫຼື ແຜນວຽກ ແລະ ແຜນງົບປະມານຂອງໂຄງການ ຕະຫຼອດ

ໄລຍະໂຄງການ ເຊັນຮັບຮອງໂດຍຜູ້ໃຫ້ທຶນ;

ຂ. ບົດບັນທຶກກອງປະຊຸມຮ່ວມກັບຜູ້ໃຫ້ທຶນ ກໍລະນີມີການດັດແປງ, ດັດແກ້ ຫຼື ສະເໜີໃຫ້ມີການປະກອບທຶນສົມທົບ;

- ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບປະເພດທຶນສົມທົບ ຫຼື ໂຄງການສົມທົບທີ່ເປັນໂຄງການລົງທຶນຂອງລັດ;

- ເອກະສານແຜນດຳເນີນງານປະຈຳປີ.

## 7. ການສະເໜີຂໍດັດແກ້ ແລະ ຂໍອ່ວາຍທຶນສົມທົບຂອງລັດຖະບານ

### 7.1 ການສະເໜີຂໍດັດແກ້

ລັດຖະບານ ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນການຈັດຕັ້ງປະຕິບັດໂຄງການ ຊກພ ໂດຍສະເພາະແມ່ນໂຄງການທີ່ລັດຖະບານປະກອບສ່ວນທາງດ້ານທຶນສົມທົບ ເພື່ອໃຫ້ເກີດປະສິດທິຜົນໃນການຈັດຕັ້ງປະຕິບັດ, ຫຼີກລ້ຽງ ຜົນກະທົບຮອບດ້ານທີ່ເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດໂຄງການ. ເພາະສະນັ້ນ, ຜູ້ຈັດຕັ້ງປະຕິບັດໂຄງການ ຕ້ອງກຳນົດແຜນການນຳໃຊ້ທຶນສົມທົບຢ່າງລະອຽດ ແລະ ຫຼີກລ້ຽງຢ່າງສຸດຂີດໃນການສະເໜີຂໍດັດແກ້ ຫຼື ຂໍດັດປັບມູນຄ່າທຶນສົມທົບຂອງລັດຖະບານ ທີ່ກໍ່ໃຫ້ເກີດຜົນກະທົບທາງລົບໃຫ້ແກ່ງົບປະມານຂອງລັດຖະບານ.

ກໍລະນີມີຄວາມຈຳເປັນຕ້ອງໄດ້ສະເໜີຂໍ້ດັດແກ້ ໃຫ້ປະຕິບັດ ດັ່ງນີ້:

- ການດັດແກ້ມູນຄ່າທຶນສົມທົບຂອງລັດຖະບານ ຈະຕ້ອງປະຕິບັດຕາມມາດຕາ 54 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ເພື່ອໃຫ້ສອດຄ່ອງຕາມນະໂຍບາຍ ແລະ ເປັນໄປຕາມກົນໄກຂອງລັດຖະບານທີ່ໄດ້ກຳນົດໄວ້;

- ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແລະ ຜູ້ຄຸ້ມຄອງໂຄງການ ສາມາດສະເໜີຂໍດັດແກ້ທຶນສົມທົບຂອງລັດຖະບານໄດ້ ບໍ່ເກີນ 02 ຄັ້ງ/ປີ ຫຼື 03 ເດືອນ ກ່ອນໄລຍະກອງປະຊຸມສະພາແຫ່ງຊາດສະໄໝສາມັນ;

- ການສະເໜີຂໍດັດແກ້ທຶນສົມທົບຂອງລັດຖະບານ ຕ້ອງຜ່ານການຕົກລົງເຫັນດີຈາກຄະນະຊີ້ນຳໂຄງການ, ຄະນະນຳກະຊວງ ຫຼື ຄະນະນຳຂອງແຂວງ/ນະຄອນຫຼວງ ແລະ ຄະນະຄຸ້ມຄອງໂຄງການທີ່ໂຄງການດັ່ງກ່າວຈັດຕັ້ງປະຕິບັດຢູ່ ໂດຍປະສານສົມທົບກັບຜົນການປະເມີນ ຂອງຄະນະສະເພາະກິດ ຈາກກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ;

- ການສະເໜີຂໍດັດແກ້ທຶນສົມທົບຂອງລັດຖະບານ ຕ້ອງປະກອບມີເອກະສານຄັດຕິດຄົບຖ້ວນປະກອບແລ້ວ ນຳສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ຄົ້ນຄ້ວາ, ພິຈາລະນາຢັ້ງຢືນ ແລະ ດຳເນີນການຕາມຂັ້ນຕອນຕໍ່ໄປ.

### 7.2 ການສະເໜີຂໍອ່ວາຍທຶນສົມທົບຂອງລັດຖະບານ

ໂດຍປະຕິບັດຕາມເນື້ອໃນເປົ້າໝາຍຂອງລັດຖະບານໃນການອະນຸມັດທຶນສົມທົບຂອງລັດຖະບານເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຊກພ ແມ່ນຫຼີກລ້ຽງຢ່າງສຸດຂີດຕໍ່ກັບການສະເໜີຂໍອ່ວາຍທຶນສົມທົບຂອງລັດຖະບານ ໄປໃຊ້ໃນກິດຈະກຳອື່ນ ຫຼື ໝູນໃຊ້ບ້ວງງົບປະມານທຶນສົມທົບຂອງລັດຖະບານທີ່ໄດ້ຮັບອະນຸມັດ ໄປໃຊ້ໃນໂຄງການທຶນສົມທົບອື່ນ ທີ່ບໍ່ເປັນໄປຕາມແຜນການວາງໄວ້. ເພາະສະ

ນັ້ນ, ການສະເໜີຂໍອ່ວາຍທຶນສົມທົບຂອງລັດຖະບານ ແມ່ນຕ້ອງໄດ້ປະຕິບັດຕາມມາດຕາ 56 ຂອງກົດໝາຍ ວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ທີ່ໄດ້ກຳນົດໄວ້ລະອຽດ.

**8. ຂໍ້ຈຳກັດໃນການນຳໃຊ້ທຶນສົມທົບຂອງລັດຖະບານ**

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຫຼື ພາກສ່ວນກ່ຽວຂ້ອງ ແລະ ເຈົ້າໜ້າທີ່ ບໍ່ໃຫ້ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ທຶນສົມທົບຂອງລັດຖະບານເຂົ້າໃນເປົ້າໝາຍທີ່ບໍ່ຖືກຕ້ອງ ຫຼື ອ່ວາຍທຶນໂດຍບໍ່ໄດ້ຮັບການຕົກລົງເຫັນດີ ຈາກກະຊວງ, ອົງການທີ່ກ່ຽວຂ້ອງ;

2. ອ່ວາຍທຶນສົມທົບຂອງລັດຖະບານ ຫຼື ຈັດສັນເອົາໄປໃຊ້ໃນບ້ວງຂອງໂຄງການອື່ນ ທີ່ບໍ່ຖືກຕ້ອງກັບຈຸດປະສົງ ແລະ ເປົ້າໝາຍຂອງແຜນງານ ຫຼື ກິດຈະກຳຂອງແຜນງານ ຫຼື ໂຄງການ;

3. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ຫຼື ອຳນາດເພື່ອຈັດສັນງົບປະມານ ແລະ ຍາດແຍ່ງຜົນປະໂຫຍດຈາກການນຳໃຊ້ທຶນສົມທົບຂອງລັດຖະບານ ຊຶ່ງຈະກໍ່ໃຫ້ເກີດຄວາມເສຍຫາຍຕໍ່ລັດຖະບານ ແລະ ຄວາມໝັ້ນຄົງຂອງຊາດ;

4. ຂັດຂວາງການກວດກາ, ການແກ້ໄຂກໍລະນີລະເມີດ ແລະ ການຈັດຕັ້ງປະຕິບັດລະບຽບການ ທີ່ຕິດພັນກັບການຄຸ້ມຄອງການຈັດຕັ້ງປະຕິບັດທຶນສົມທົບຂອງລັດຖະບານ;

5. ສະໜອງຂໍ້ມູນຊັກຊ້າ, ບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນໃນເວລາລາຍງານການຈັດຕັ້ງປະຕິບັດ ແລະ ກໍລະນີເກີດບັນຫາໃນໄລຍະການນຳໃຊ້ທຶນສົມທົບລັດຖະບານ;

6. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຫຼື ບຸກຄົນໃດທີ່ລະເມີດ ຄຳແນະນຳສະບັບນີ້ ຈະຖືກປະຕິບັດວິໄນຕາມລະບຽບກົດໝາຍຂອງ ສປປ ລາວ.

## III. ການຈັດຕັ້ງປະຕິບັດ

1. ມອບໃຫ້ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງໂຄສະນາ, ເຜີຍແຜ່, ແລະ ປະຕິບັດຕາມຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

2. ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານ ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄ້ວາ ແລະ ແນະນຳແກ້ໄຂຕາມຄວາມເໝາະສົມໃຫ້ທັນເວລາ.

## IV. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີ**

ຊອນໄຊ ສີພັນດອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ ເລກທີ 0760/ກຜທ

ນະຄອນຫຼວງວຽງຈັນ, ວັນທີ 14 ພຶດສະພາ 2021

# ຄຳແນະນຳ
# ກ່ຽວກັບ ການໃຫ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ

- ອີງຕາມ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການສະເໜີຂອງ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 222/ລທ2, ລົງວັນທີ 07 ພຶດສະພາ 2021.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ອອກຄຳແນະນຳ:

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ວາງອອກ ເພື່ອຜັນຂະຫຍາຍ ມາດຕາ 9, 10, 11 ແລະ 15 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ໃນການກຳນົດບັນຊີກິດຈະການສົ່ງເສີມການລົງທຶນ ແລະ ເຂດ, ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການໃຫ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກຳໄລ ແລະ ການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ແນໃສ່ເຮັດໃຫ້ສາມາດຈັດຕັ້ງປະຕິບັດວຽກງານສົ່ງເສີມການລົງທຶນ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ມີປະສິດທິຜົນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ຄຳແນະນຳສະບັບນີ້ ນຳໃຊ້ສຳລັບວິສາຫະກິດ ຢູ່ ສປປ ລາວ ທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ທີ່ໄດ້ຮັບອະນຸຍາດລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.

## II. ເນື້ອໃນ

### 1. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍດັ່ງນີ້:

1) **ນະໂຍບາຍດ້ານອາກອນກຳໄລ** ໝາຍເຖິງການຍົກເວັ້ນອາກອນກຳໄລ ໃຫ້ແກ່ວິສາຫະກິດທີ່ລົງທຶນໃນກິດຈະການ ທີ່ໄດ້ຮັບການສົ່ງເສີມການລົງທຶນ ຕາມໄລຍະເວລາ ທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
2) **ນະໂຍບາຍດ້ານຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ** ໝາຍເຖິງການຍົກເວັ້ນການເກັບຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ໃຫ້ແກ່ວິສາຫະກິດທີ່ລົງທຶນໃນກິດຈະການ ທີ່ໄດ້ຮັບການສົ່ງເສີມການລົງທຶນ ຕາມໄລຍະເວລາ ທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
3) **ກິດຈະການທີ່ໄດ້ຮັບການສົ່ງເສີມ** ໝາຍເຖິງກິດຈະການຕາມຂະແໜງການ ທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຊຶ່ງຜັນຂະຫຍາຍຈາກມາດຕາ 9 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໂດຍກຳນົດເປັນບັນຊີລະອຽດ ຕາມເອກະສານຊ້ອນທ້າຍ 1 ຂອງຄຳແນະນຳສະບັບນີ້. ເອກະສານຊ້ອນທ້າຍດັ່ງກ່າວ ອາດມີການປັບປຸງເພື່ອໃຫ້ສອດຄ່ອງກັບສະພາບເປັນຈິງໃນແຕ່ລະໄລຍະ.
4) **ນະໂຍບາຍສົ່ງເສີມຕາມເຂດ** ໝາຍເຖິງການແບ່ງເຂດ ທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຊຶ່ງຜັນຂະຫຍາຍຈາກ ມາດຕາ 10 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ໂດຍກຳນົດເປັນບັນຊີລະອຽດຕາມເອກະສານຊ້ອນທ້າຍ 2 ຂອງຄຳແນະນຳສະບັບນີ້. ເອກະສານຊ້ອນທ້າຍດັ່ງກ່າວ ອາດມີການປັບປຸງເພື່ອໃຫ້ສອດຄ່ອງກັບສະພາບເປັນຈິງໃນແຕ່ລະໄລຍະ.
5) **ໃບສົ່ງເສີມການລົງທຶນ** ແມ່ນເອກະສານຮັບຮອງການໃຫ້ນະໂຍບາຍສົ່ງເສີມການລົງທຶນຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຊຶ່ງອອກໂດຍ ຂະແໜງການແຜນການ ແລະ ການລົງທຶນ.

## 2. ການໃຫ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ

### 2.1 ເງື່ອນໄຂການອະນຸຍາດໃຫ້ນະໂຍບາຍສົ່ງເສີມການລົງທຶນ

ວິສາຫະກິດ ທີ່ລົງທຶນຢູ່ ສປປ ລາວ ທີ່ມີຈຸດປະສົງສະເໜີຂໍນະໂຍບາຍດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ວິສາຫະກິດ ທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ຕາມມາດຕາ 9 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ປະຕິບັດຕາມ ເງື່ອນໄຂສະເພາະ ຊຶ່ງມີລາຍລະອຽດກຳນົດໄວ້ໃນເອກະສານຊ້ອນທ້າຍ ເລກທີ 1 ຂອງຄຳແນະນຳສະບັບນີ້;
2) ການລົງທຶນຢ່າງຕ່ຳ 1,2 ຕື້ ກີບ ຫຼື ມີການນຳໃຊ້ວິຊາການລາວແຕ່ 30 ຄົນ ຫຼື ມີການນຳໃຊ້ແຮງງານລາວ ທີ່ມີສັນຍາແຮງງານ ຢ່າງຕ່ຳ 1 ປີ ແຕ່ 50 ຄົນຂຶ້ນໄປ;
3) ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ໂດຍຜ່ານການຢັ້ງຢືນນຳ ທະນາຄານແຫ່ງ ສປປ ລາວ ຕາມທີ່ໄດ້ກຳນົດໃນ ມາດຕາ 53 ແລະ 54 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
4) ດຳເນີນທຸລະກິດປົກກະຕິ ແລະ ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງຄົບຖ້ວນ;
5) ປະຕິບັດພັນທະດ້ານສິ່ງແວດລ້ອມຢ່າງເຄັ່ງຄັດ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ.

## 2.2 ການສະເໜີຂໍນະໂຍບາຍສົ່ງເສີມການລົງທຶນ

ວິສາຫະກິດທີ່ຂັ້ນສູນກາງອະນຸມັດ ແມ່ນໃຫ້ສະເໜີຕໍ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ເປັນຜູ້ຄົ້ນຄວ້າ ແລະ ອອກໃບສົ່ງເສີມການລົງທຶນ.

ວິສາຫະກິດທີ່ຂັ້ນແຂວງ, ນະຄອນຫຼວງອະນຸມັດ ແມ່ນໃຫ້ສະເໜີຕໍ່ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ໃນນາມຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ເປັນຜູ້ຄົ້ນຄວ້າ ແລະ ອອກໃບສົ່ງເສີມການລົງທຶນ.

ສໍາລັບ ໂຄງການລົງທຶນສໍາປະທານຂະໜາດໃຫຍ່ ທີ່ມີສັນຍາສໍາປະທານກັບລັດຖະບານ ແລະ ມີມະຕິສະພາແຫ່ງຊາດຮັບຮອງຕໍ່ການໃຫ້ນະໂຍບາຍສົ່ງເສີມການລົງທຶນ ທີ່ໄດ້ຮັບນະໂຍບາຍສົ່ງເສີມເກີນກົດໝາຍກໍານົດ ແມ່ນບໍ່ຈໍາເປັນຕ້ອງຍື່ນສະເໜີຂໍໃບສົ່ງເສີມການລົງທຶນ ອີກ.

## 2.3 ການປະກອບເອກະສານ ຂໍນະໂຍບາຍສົ່ງເສີມການລົງທຶນ

ການຂໍນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກໍາໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສໍາປະທານທີ່ດິນຂອງລັດ ຕ້ອງປະກອບມີເອກະສານ ດັ່ງນີ້:

1) ໃບສະເໜີຂອງບໍລິສັດ;
2) ສໍາເນົາ ໃບອະນຸຍາດລົງທຶນ (ຖ້າມີ), ໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການມອບພັນທະອາກອນ ແລະ ສັນຍາເຊົ່າທີ່ດິນ ຫຼື ສັນຍາສໍາປະທານກັບລັດຖະບານ (ຖ້າມີ);
3) ສໍາເນົາ ໃບຢັ້ງຢືນການນໍາເຂົ້າທຶນ ທີ່ເປັນເງິນ ແລະ/ຫຼື ເປັນວັດຖຸ;
4) ສໍາເນົາ ໃບຢັ້ງຢືນສິ່ງແວດລ້ອມ;
5) ສໍາເນົາ ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນການດໍາເນີນທຸລະກິດ ທີ່ໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;
6) ເອກະສານກ່ຽວຂ້ອງອື່ນໆ.

## 2.4 ຂັ້ນຕອນການພິຈາລະນາໃຫ້ນະໂຍບາຍສົ່ງເສີມການລົງທຶນ

ຂະແໜງການແຜນການ ແລະ ການລົງທຶນ ໄດ້ຮັບເອກະສານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2.3 ຂອງຄໍາແນະນໍາສະບັບນີ້, ຂະແໜງການແຜນການ ແລະ ການລົງທຶນ ຕ້ອງສົ່ງເອກະສານຄໍາຮ້ອງ ຂໍຄໍາເຫັນ ແລະ ປະສານສົມທົບກັບຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ລົງກວດກາພື້ນທີ່ຕົວຈິງ ພາຍໃນເວລາ 10 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

ພາຍຫຼັງມີຄໍາເຫັນຈາກຂະແໜງການ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້ານໍາສະເໜີ ຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງດ້ານຫຼັກການ ພາຍໃນເວລາ 15 ວັນລັດຖະການ.

ຫຼັງຈາກນັ້ນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ອອກໃບສົ່ງເສີມການລົງທຶນ ພາຍໃນ 05 ວັນລັດຖະການ. ໃນກໍລະນີ ບໍ່ເຫັນດີ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງແຈ້ງເປັນລາຍລັກ ອັກສອນ ໃຫ້ບໍລິສັດຊາບພາຍໃນເວລາ 02 ວັນລັດຖະການ ນັບແຕ່ວັນໄດ້ຮັບການຕົກລົງ.

ພາຍຫຼັງຂະແໜງການແຜນການ ແລະ ການລົງທຶນ ອອກໃບສົ່ງເສີມການລົງທຶນໃຫ້ແກ່ບໍລິສັດແລ້ວ ຕ້ອງນຳສົ່ງໃຫ້ຂະແໜງການການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມ ແລະ ຈັດຕັ້ງປະຕິບັດ.

## 3. ການຈັດຕັ້ງປະຕິບັດ ນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ

### 3.1 ການຈັດຕັ້ງປະຕິບັດຂອງວິສາຫະກິດ

ການຈັດຕັ້ງປະຕິບັດຂອງວິສາຫະກິດພາຍຫຼັງໄດ້ຮັບນະໂຍບາຍ ຕ້ອງປະຕິບັດ ດັ່ງລຸ່ມນີ້:

- ປະຕິບັດການໄດ້ຮັບນະໂຍບາຍ ຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນນຳລັດ ຕາມການກຳນົດໄລຍະເວລາຍົກເວັ້ນ ທີ່ໄດ້ກຳນົດໄວ້ໃນໃບສົ່ງເສີມການລົງທຶນ;
- ຕ້ອງປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ;
- ສະຫຼຸບ, ລາຍງານ ການດຳເນີນທຸລະກິດຂອງຕົນ ປະຈຳ 06 ເດືອນ ແລະ ປະຈຳປີ ໃຫ້ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ ແລະ ຂະແໜງການອື່ນກ່ຽວຂ້ອງ ຊາບ;
- ຕ້ອງເຄື່ອນໄຫວດຳເນີນກິດຈະການຂອງວິສາຫະກິດ ຕາມບົດວິພາກເສດຖະກິດ-ເຕັກນິກ ຄຽງຄູ່ກັບການ ປົກປັກຮັກສາສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
- ຕ້ອງເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

### 3.2 ການຈັດຕັ້ງປະຕິບັດຂອງຂະແໜງການພາກລັດ

ການຈັດຕັ້ງປະຕິບັດຂອງຂະແໜງການພາກລັດ ຕ້ອງປະຕິບັດ ດັ່ງລຸ່ມນີ້:

- ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອະນຸຍາດ ການໃຫ້ນະໂຍບາຍສົ່ງເສີມແກ່ວິສາຫະກິດ ທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຕ້ອງແຈ້ງໃຫ້ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ;
- ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ຄຸ້ມຄອງວຽກງານການໃຫ້ນະໂຍບາຍຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ໃຫ້ແກ່ວິສາຫະກິດທີ່ລົງທຶນຢູ່ ສປປ ລາວ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
- ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດການຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນນຳລັດໃຫ້ແກ່ວິສາຫະກິດ ຕາມກຳນົດໄລຍະເວລາຍົກເວັ້ນທີ່ໄດ້ກຳນົດໄວ້ໃນໃບສົ່ງເສີມການລົງທຶນ, ພາຍຫຼັງສິ້ນສຸດໄລຍະຍົກເວັ້ນອາກອນກຳໄລ ແລະ ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານ

ທີ່ດິນນໍາລັດດັ່ງກ່າວແລ້ວ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. ພ້ອມທັງ, ສະຫຼຸບລາຍງານປະຈໍາໄຕມາດ ແລະ ປະຈໍາປີ ສົ່ງໃຫ້ຂະແໜງແຜນການ ແລະ ການລົງທຶນ ຢ່າງເປັນປົກກະຕິ.

## 4. ການສິ້ນສຸດໄລຍະເວລາໄດ້ຮັບນະໂຍບາຍຍົກເວັ້ນອາກອນກໍາໄລ ແລະ ຄ່າເຊົ່າ ຫຼື ສໍາປະທານທີ່ດິນຂອງລັດ

ວິສາຫະກິດທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຈະສິ້ນສຸດໃນກໍລະນີລຸ່ມນີ້:

- ໝົດອາຍຸ ຕາມກໍານົດເວລາທີ່ໄດ້ຮັບການຍົກເວັ້ນ ທີ່ໄດ້ລະບຸຢູ່ໃນໃບສົ່ງເສີມການລົງທຶນ;
- ມີການຖອນ ຫຼື ຖືກຍົກເລີກ ໃບສົ່ງເສີມການລົງທຶນ;
- ກໍລະນີ ມີການຍຸບເລີກວິສາຫະກິດ ຫຼື ວິສາຫະກິດລົ້ມລະລາຍ ຕາມຂັ້ນຕອນທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການ.

## 5. ການຄຸ້ມຄອງ ແລະ ຕິດຕາມກວດກາ

ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອະນຸຍາດ, ຄຸ້ມຄອງ ຕິດຕາມກວດກາ ວຽກງານການໃຫ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກໍາໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສໍາປະທານທີ່ດິນຂອງລັດ ໃຫ້ແກ່ວິສາຫະກິດທີ່ລົງທຶນ ຢູ່ ສປປ ລາວ ແລະ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ພ້ອມທັງ, ກໍານົດມາດຕະການໃນການຄຸ້ມຄອງ ເພື່ອຈໍາກັດຊ່ອງຫວ່າງການສວຍໃຊ້ນະໂຍບາຍສົ່ງເສີມການລົງທຶນ ດ້ານອາກອນກໍາໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສໍາປະທານທີ່ດິນຂອງລັດ ໃຫ້ມີຄວາມຮັດກຸມ ເພື່ອຈັດຕັ້ງຄຸ້ມຄອງການນໍາໃຊ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບການ.

## 6. ມາດຕະການຕໍ່ຜູ້ລະເມີດ

ໃນກໍລະນີ ວິສາຫະກິດ ຫາກເຄື່ອນໄຫວບໍ່ສອດຄ່ອງກັບກິດຈະການທີ່ໄດ້ຮັບການສົ່ງເສີມ ແລະ ບໍ່ປະຕິບັດ ຕາມກົດໝາຍ ແລະ ລະບຽບການ ຂະແໜງແຜນການ ແລະ ການລົງທຶນ ຕ້ອງອອກໜັງສືແຈ້ງເຕືອນ ເພື່ອໃຫ້ປັບປຸງແກ້ໄຂ ພາຍໃນກໍານົດ 45 ວັນລັດຖະການ ນັບແຕ່ມື້ໄດ້ຮັບໜັງສືແຈ້ງເຕືອນເປັນຕົ້ນໄປ. ພາຍຫຼັງສິ້ນສຸດ ໄລຍະເວລາແຈ້ງເຕືອນ ຫາກວິສາຫະກິດບໍ່ສາມາດແກ້ໄຂ ຫຼື ປັບປຸງ ໄດ້ຢ່າງຖືກຕ້ອງ ແມ່ນຈະຖືກແຈ້ງຖອນ ຫຼື ຍົກເລີກໃບສົ່ງເສີມການລົງທຶນ.

## III. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງໃນການຈັດຕັ້ງປະຕິບັດ, ເຜີຍແຜ່, ແນະນໍາ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອໍານາດການປົກຄອງທ້ອງຖິ່ນທຸກຂັ້ນ ລວມທັງວິສາຫະກິດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຄໍາແນະນໍາສະບັບນີ້ຢ່າງເຂັ້ມງວດ.

**IV. ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຮອງນາຍົກລັດຖະມົນຕີ
ລັດຖະມົນຕີ

ສອນໄຊ ສີພັນດອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ                                                    ເລກທີ 0889/ກຜທ

ນະຄອນຫຼວງວຽງຈັນ, ວັນທີ 09 ມິຖຸນາ 2021

# ຄໍາແນະນໍາ

# ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ອອກຄໍາແນະນໍາ:**

## I. ຈຸດປະສົງ

1. ຄໍາແນະນໍາສະບັບນີ້ວາງອອກເພື່ອຜັນຂະຫຍາຍ ແລະ ແນະນໍາການຈັດຕັ້ງປະຕິບັດ ເນື້ອໃນບາງມາດຕາ ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015 ເພື່ອ ຜັນຂະຫຍາຍເນື້ອໃນຂອງກົດໝາຍດັ່ງກ່າວ ມີຄວາມລະອຽດຈະແຈ້ງຂຶ້ນ, ມີຄວາມເຂົ້າໃຈ ແລະ ສາມາດປະຕິບັດໄດ້ຖືກຕ້ອງຕໍ່ບັນດາເນື້ອໃນທາງດ້ານວິຊາການ ທີ່ບັນຍັດໄວ້ໃນກົດໝາຍດັ່ງກ່າວ.
2. ເພື່ອໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ກ່ຽວຂ້ອງ ໄດ້ນໍາໃຊ້ເປັນບ່ອນອີງໃນການສ້າງ, ຄຸ້ມຄອງ, ປະຕິບັດ, ຕິດຕາມ, ກວດກາ ແລະ ສະຫຼຸບ ລາຍງານແຜນການລົງທຶນຂອງລັດປະຈໍາປີ.

## II. ເນື້ອໃນ

### 1. ມາດຕາ 2 ການລົງທຶນຂອງລັດ

ການລົງທຶນຂອງລັດ ໝາຍເຖິງການນໍາໃຊ້ງົບປະມານແຫ່ງລັດ, ຊັບພະຍາກອນທໍາມະຊາດ, ຊັບ ສິນ, ລິຂະສິດຂອງລັດ ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ຜ່ານລະບົບງົບປະມານເຂົ້າໃສ່ ໂຄງການກໍ່ສ້າງພື້ນຖານໂຄງລ່າງທີ່ຮັບໃຊ້ສາທາລະນະປະໂຫຍດ, ສະໜອງວັດຖຸປະກອນ ແລະ ສິ່ງເສີມວິຊາ ການ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

**2. ມາດຕາ 3 ອະທິບາຍຄໍາສັບ**

ໃນຂໍ້ທີ 14 ເຈົ້າຂອງໂຄງການ: ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກ ຄອງທ້ອງຖິ່ນ ທີ່ໄດ້ຮັບງົບປະມານການລົງທຶນລັດ ມີດັ່ງນີ້:

2.1. ຂັ້ນສູນກາງແມ່ນ: ກະຊວງ, ອົງການລັດທຽບເທົ່າກະຊວງ ຕາງໜ້າໂດຍລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ;

2.2. ຂັ້ນທ້ອງຖິ່ນແມ່ນ: ອົງການປົກຄອງແຂວງຕາງໜ້າໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ເຈົ້າຂອງໂຄງການສາມາດມອບສິດໃຫ້ກົມກອງ, ພະແນກການຂັ້ນແຂວງ ຫຼື ເມືອງ ເປັນຜູ້ຮັບຜິດຊອບເຊັນສັນຍາ ແລະ ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເຊິ່ງຜູ້ໄດ້ຮັບມອບສິດດັ່ງກ່າວຕ້ອງແມ່ນຜູ້ທີ່ຈະຄຸ້ມຄອງ ນໍາໃຊ້ໂຄງການພາຍຫຼັງໂຄງການສໍາເລັດ ແລະ ເອີ້ນວ່າ ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ.

**3. ມາດຕາ 9 ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ**

ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ ປະກອບດ້ວຍ: ການກໍ່ສ້າງ ແລະ ການບູລະນະສ້ອມແປງໃຫຍ່, ພື້ນຖານໂຄງລ່າງສາທາລະນຸປະໂພກໄດ້ແກ່ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ສໍານັກງານຫ້ອງການ ແລະ ບັນດາພື້ນຖານວັດຖຸເຕັກນິກ.

ສໍາລັບການສ້ອມແປງຟື້ນຟູພື້ນຖານໂຄງລ່າງ ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດທາງທໍາມະຊາດເພື່ອໃຫ້ສາມາດກັບມານໍາໃຊ້ໄດ້ຢ່າງເປັນປົກກະຕິຕາມຄວາມສາມາດ ແລະ ເປົ້າໝາຍໂຄງການເອີ້ນວ່າການສ້ອມແປງຟື້ນຟູຜົນກະທົບຈາກໄພພິບັດທາງທໍາມະຊາດ, ເຊິ່ງການສ້ອມແປງຟື້ນຟູໄພພິບັດຕ້ອງແມ່ນຜົນເສຍຫາຍຕໍ່ໂຄງການທີ່ສໍາເລັດ ແລະ ໂຄງການທີ່ໄດ້ນໍາໃຊ້ແລ້ວ; ສ່ວນໂຄງການທີ່ກໍາລັງຈັດຕັ້ງປະຕິບັດ ແລະ ມີການກວດກາຄວາມສໍາເລັດຂອງໜ້າວຽກ ແຕ່ໜ້າວຽກທີ່ສໍາເລັດໄປນັ້ນໄດ້ຮັບຜົນກະທົບຈາກໄພພິບັດ ແມ່ນໃຫ້ສະ ເໜີດັດແກ້ມູນຄ່າໂຄງການຕາມມາດຕາ 54 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ. ສ່ວນການນໍາສະເໜີເອົາໂຄງການສ້ອມແປງຟື້ນຟູພື້ນຖານໂຄງລ່າງ ເຂົ້າແຜນການລົງທຶນຂອງລັດ, ການປະເມີນໂຄງການ, ການຮັບຮອງໂຄງການ, ການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ແລະ ການສະໜອງແຫຼ່ງທຶນ ແມ່ນໃຫ້ປະຕິບັດຕາມໂຄງການລົງທຶນຂອງລັດປົກກະຕິ.

ສໍາລັບການແກ້ໄຂໄພພິບັດສຸກເສີນ: ໝາຍເຖິງ ໂຄງການແກ້ໄຂສຸກເສີນຮີບດ່ວນ ບັນດາພື້ນຖານໂຄງລ່າງ ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດທາງທໍາມະຊາດ ໃຫ້ສາມາດນໍາໃຊ້ໃນເບື້ອງຕົ້ນເພື່ອໃຫ້ການຜະລິດ, ການບໍລິ ການ, ການຄົມມະນາຄົມ-ຂົນສົ່ງ ສາມາດດໍາເນີນການເຄື່ອນໄຫວໄດ້ ໄລຍະລໍຖ້າການຟື້ນຟູສູ່ສະພາບປົກກະຕິ. ສໍາລັບງົບປະມານຊໍາລະແມ່ນຕາມການຕົກລົງຂອງລັດຖະບານໃນແຕ່ລະໄລຍະ.

**4. ມາດຕາ 16 ປະເພດໂຄງການລົງທຶນຂອງລັດ**

ປະເພດໂຄງການລົງທຶນຂອງລັດ ປະກອບດ້ວຍ 2 ປະເພດ ຄື: ໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປົກກະຕິ.

4.1 ໂຄງການລົງທຶນຂອງລັດລະດັບຊາດ

ໂຄງການລົງທຶນຂອງລັດລະດັບຊາດ: ໝາຍເຖິງ ໂຄງການທີ່ມີຄວາມໝາຍກວມລວມທົ່ວປະເທດ, ພົວພັນຫຼາຍຂະແໜງການ ແລະ ຫຼາຍທ້ອງຖິ່ນ; ເປັນໂຄງການທີ່ມີລັກສະນະຍຸດທະສາດ, ໃຫ້

ຜົນຕອບແທນສູງ, ສາມາດຂັບເຄື່ອນໃຫ້ແກ່ການພັດທະນາ ແລະ ມີຄວາມຍືນຍົງ. ໂຄງການລົງທຶນຂອງລັດລະດັບຊາດ ບໍ່ກຳນົດມູນຄ່າ (ບໍ່ຂຶ້ນກັບມູນຄ່າໂຄງການ), ສຳລັບໄລຍະການປະຕິບັດ ແລະ ໄລຍະຊຳລະ ແມ່ນປະຕິບັດຕາມມາດຕາ 18 ແລະ ມາດຕາ 19 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

ສຳລັບການນຳສະເໜີເອົາໂຄງການລະດັບຊາດເຂົ້າແຜນການລົງທຶນຂອງລັດ, ການປະເມີນໂຄງການ, ການຮັບຮອງໂຄງການ, ການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ແລະ ການສະໜອງແຫຼ່ງທຶນ ມີດັ່ງນີ້:

1) ອົງການທີ່ມີສິດນຳສະເໜີໂຄງການລົງທຶນຂອງລັດລະດັບຊາດ ແມ່ນກະຊວງ, ອົງການລັດທຽບເທົ່າກະຊວງ ເປັນຜູ້ຄົ້ນຄວ້າໂດຍສົມທົບກັບບັນດາທ້ອງຖິ່ນທີ່ໂຄງການຕັ້ງຢູ່ ເພື່ອນຳສະເໜີລັດຖະບານພິຈາລະນາ ໂດຍຜ່ານການຄົ້ນຄ້ວາສະເໜີຂອງກະຊວງແຜນການ ແລະ ການລົງທຶນ. ການນຳສະເໜີໂຄງ ການລົງທຶນຂອງລັດລະດັບຊາດຕ້ອງສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 22, 33 ແລະ 34 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

2) ອົງການທີ່ມີສິດປະເມີນໂຄງການລົງທຶນຂອງລັດລະດັບຊາດ ແມ່ນກະຊວງແຜນການ ແລະ ການລົງທຶນ.

3) ອົງການທີ່ມີສິດຮັບຮອງໂຄງການລົງທຶນຂອງລັດລະດັບຊາດ ແມ່ນສະພາແຫ່ງຊາດ ໂດຍການສະ ເໜີຂອງລັດຖະບານເປັນລາຍໂຄງການ.

4) ການຄຸ້ມຄອງຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດລະດັບຊາດ ແມ່ນລັດຖະບານເປັນຜູ້ມອບໝາຍໃຫ້ກະຊວງ ຫຼື ອົງການລັດທຽບເທົ່າກະຊວງ ເປັນຜູ້ຮັບຜິດຊອບໂດຍແຕ່ງຕັ້ງຄະນະຮັບຜິດຊອບສະເພາະ ຕາມມາດຕາ 41 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

5) ແຫຼ່ງທຶນໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດລະດັບຊາດ ແມ່ນລັດຖະບານເປັນຜູ້ຕົກລົງ ແຕ່ບໍ່ແມ່ນພາກລາຍຈ່າຍລົງທຶນຂອງລັດປະຈຳປີ.

4.2 ໂຄງການລົງທຶນຂອງລັດປົກກະຕິ

ໂຄງການລົງທຶນຂອງລັດປົກກະຕິ: ໝາຍເຖິງ ໂຄງການຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ເພື່ອປະຕິບັດວຽກງານຈຸດສຸມທີ່ໄດ້ກຳນົດໃນແຜນພັດທະນາຂອງຕົນ, ໂຄງການລົງທຶນຂອງລັດປົກກະຕິລວມມີ 5 ປະເພດໂຄງການ ເຊິ່ງແຕ່ລະປະເພດໂຄງການມີມູນຄ່າ, ໄລຍະປະຕິບັດ ແລະ ໄລຍະການຊຳລະໂຄງການ ຕາມທີ່ໄດ້ກຳນົດໃນມາດຕາ 18 ແລະ ມາດຕາ 19 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

ສຳລັບການນຳສະເໜີເອົາໂຄງການປົກກະຕິເຂົ້າແຜນການລົງທຶນຂອງລັດ, ການປະເມີນໂຄງການ, ການຮັບຮອງໂຄງການ, ການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ແລະ ການສະໜອງແຫຼ່ງທຶນມີດັ່ງນີ້:

1) ອົງການທີ່ມີສິດນຳສະເໜີໂຄງການລົງທຶນຂອງລັດປົກກະຕິ: ປະກອບມີ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ເປັນຜູ້ຄົ້ນຄວ້າສະເໜີໂຄງການປະເພດ I, II, III, IV ແລະ V ເພື່ອປະຕິບັດວຽກງານຈຸດສຸມທີ່ໄດ້ກຳນົດໃນແຜນພັດທະນາຂອງຕົນ. ການນຳສະເໜີ

ໂຄງການລົງທຶນຂອງລັດປົກກະຕິຕ້ອງສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 19, 22 ແລະ 33 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

2) ອົງການທີ່ມີສິດປະເມີນໂຄງການລົງທຶນຂອງລັດປົກກະຕິ ມີດັ່ງນີ້:

- ກະຊວງແຜນການ ແລະ ການລົງທຶນ ປະເມີນໂຄງການປະເພດ I, II, III, IV ແລະ V ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ປະເມີນໂຄງການປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ;
- ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ປະເມີນໂຄງການປະເພດ V ຂອງແຂວງຕົນ.

3) ອົງການທີ່ມີສິດຮັບຮອງໂຄງການລົງທຶນຂອງລັດປົກກະຕິ ປະກອບມີ: ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມແຕ່ລະປະເພດໂຄງການ ມີດັ່ງນີ້:

- ສະພາແຫ່ງຊາດ: ພິຈາລະນາຮັບຮອງໂຄງການປະເພດ I, II, III, IV ແລະ V ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ ໂດຍການສະເໜີຂອງລັດຖະບານ.
- ສະພາປະຊາຊົນຂັ້ນແຂວງ: ພິຈາລະນາຮັບຮອງ ໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ໂດຍການສະເໜີຂອງອົງການປົກຄອງແຂວງ, ນະຄອນຫຼວງ.

4) ການຄຸ້ມຄອງຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດປົກກະຕິ: ແມ່ນກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການປະເພດ I, II, III, IV ແລະ V ຂອງຕົນ.

5) ແຫຼ່ງທຶນໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດປົກກະຕິ ມີດັ່ງນີ້:

- ໂຄງການປະເພດ I ແມ່ນລັດຖະບານເປັນຜູ້ຕົກລົງ ແຕ່ບໍ່ແມ່ນພາກລາຍຈ່າຍລົງທຶນຂອງລັດ ປະຈຳປີ.
- ໂຄງການປະເພດ II, III, IV ແລະ V ນຳໃຊ້ພາກລາຍຈ່າຍລົງທຶນຂອງລັດ ປະຈຳປີ.

## 5. ມາດຕາ 20 ຄ່າໃຊ້ຈ່າຍລວມໃນການປະຕິບັດກິດຈະກຳຂອງໂຄງການລົງທຶນຂອງລັດ

ຄ່າໃຊ້ຈ່າຍໃນການປະຕິບັດກິດຈະກຳທີ່ສາມາດປະກອບເຂົ້າໃນໂຄງການລົງທຶນຂອງລັດ ມີດັ່ງນີ້:

1) ການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ແລະ ເຄຫາສະຖານ ປະກອບມີ:

- ຄ່າໃຊ້ຈ່າຍໃນການກະກຽມໂຄງການມີ: ການເກັບກຳຂໍ້ມູນ, ວິເຄາະ, ວິໄຈຂໍ້ມູນ ແລະ ສ້າງບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ການສຳຫຼວດ-ອອກແບບໂຄງການ, ການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ, ຄ່າຊົດເຊີຍ ແລະ ເວນຄືນສິ່ງກີດຂວາງໃນການປະຕິບັດໂຄງການ;
- ຄ່າໃຊ້ຈ່າຍໃນການປະຕິບັດໂຄງການມີ: ຄ່າວັດສະດຸ, ອຸປະກອນ ແລະ ຄ່າແຮງງານ;
- ຄ່າໃຊ້ຈ່າຍໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

- ຄ່າໃຊ້ຈ່າຍທົດລອງນຳໃຊ້;
- ຄ່າໃຊ້ຈ່າຍຄຸ້ມຄອງໂຄງການ;
- ຄ່າທີ່ປຶກສາໂຄງການ;
- ຄ່າອາກອນ;
- ດອກເບ້ຍເງິນກູ້ສຳລັບໂຄງການກູ້ຢືມ.

2) ການສະໜອງວັດຖຸປະກອນ ປະກອບມີ:
- ຄ່າຊື້ພາຫະນະ ແລະ ວັດຖຸປະກອນຮັບໃຊ້ການຜະລິດ;
- ຄ່າຊື້ເຄື່ອງເຕັກນິກ-ວິຊາການ ແລະ ຊັບສິນ;
- ຄ່າຊື້ວັດຖຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນີເຈີທີ່ຈຳເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່.

3) ການສົ່ງເສີມວິຊາການ ທີ່ບໍ່ຕິດພັນກັບການກໍ່ສ້າງ ແລະ ສະໜອງວັດຖຸປະກອນ ປະກອບມີ:
- ຄ່າຝຶກອົບຮົມ;
- ຄ່າຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ;
- ຄ່າສົ່ງເສີມການຜະລິດ;
- ຄ່າສ້າງແຜນແມ່ບົດພັດທະນາເສດຖະກິດ-ສັງຄົມ.

**6. ມາດຕາ 21 ການກຳນົດໂຄງການລົງທຶນຂອງລັດ**

ຄ່າໃຊ້ຈ່າຍໃນການປະຕິບັດບັນດາກິດຈະກຳຕ່າງໆ ຕາມຂໍ້ 5 ຂອງຄຳແນະນຳສະບັບນີ້ ສາມາດສັງລວມເຂົ້າເປັນໂຄງການລົງທຶນຂອງລັດ ດັ່ງນີ້:

1) ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ: ການກຳນົດມູນຄ່າໂຄງການໃຫ້ອີງໃສ່ແບບແຜນຜັງກໍ່ສ້າງ, ສ້ອມແປງ, ມາດຖານເຕັກນິກ, ລາຄາຫົວໜ່ວຍ ໂດຍຜ່ານການຢັ້ງຢືນທາງການຈາກຂະແໜງ ການເຕັກນິກທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ. ບັນດາໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ຕ້ອງຜ່ານການປະມູນຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ລົງວັນທີ 2 ພະຈິກ 2017.

2) ໂຄງການສົ່ງເສີມວິຊາການ ທີ່ຕິດພັນກັບການກໍ່ສ້າງ ມີດັ່ງນີ້:
- ໂຄງການຄຸ້ມຄອງໂຄງການ: ແມ່ນກຳນົດຄ່າໃຊ້ຈ່າຍໃນການຕິດຕາມ, ກວດກາການຈັດຕັ້ງປະຕິບັດໂຄງການຂອງຄະນະຮັບຜິດຊອບໂຄງການ ເລີ່ມແຕ່ມື້ເລີ່ມຕົ້ນໂຄງການຈົນເຖິງສຳເລັດໂຄງການ ເຊິ່ງອີງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເປັນຜູ້ຂຶ້ນແຜນ ແລະ ຄຸ້ມຄອງນຳໃຊ້. ມູນຄ່າໂຄງການໃຫ້ຄິດໄລ່ຕາມມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານລັດ ເລກທີ 4000/ກງ, ລົງວັນທີ 12 ທັນວາ 2018 (ໃນກໍລະນີມີການປັບປຸງໃໝ່ກໍ່ໃຫ້ຖືເອົາສະບັບປັບປຸງ ໃໝ່ນັ້ນປ່ຽນແທນ).
- ໂຄງການສຳຫຼວດ-ອອກແບບ, ຄ່າວ່າຈ້າງທີ່ປຶກສາ, ຄ່າຊົດເຊີຍເວນຄືນສິ່ງກີດຂວາງ ແລະ ໂຄງການສຶກສາຄວາມເປັນໄປໄດ້ (FS); ການຄິດໄລ່ມູນຄ່າໂຄງການແມ່ນອີງໃສ່ໜ້າວຽກ

ແລະ ລາຄາຫົວໜ່ວຍຂອງຂະແໜງການເຕັກນິກກ່ຽວຂ້ອງໄດ້ກຳນົດ ແລະ ຜ່ານການຢັ້ງຢືນເປັນທາງການຈາກຂະ ແໜງການເຕັກນິກກ່ຽວຂ້ອງ.

ບັນດາໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງປະເພດ I, II, III ແລະ IV ຕ້ອງໄດ້ວ່າຈ້າງບໍລິສັດທີ່ປຶກສາໂຄງການ. ສ່ວນໂຄງການປະເພດ V ສາມາດນຳໃຊ້ວິຊາການຈາກຂະແໜງການຄຸ້ມຄອງເຕັກນິກ ເພື່ອເປັນທີ່ປຶກສາໂຄງການ.

ເຊິ່ງໂຄງການວ່າຈ້າງທີ່ປຶກສາ, ໂຄງການສຶກສາຄວາມເປັນໄປໄດ້ (FS) ແລະ ໂຄງການສຳຫຼວດ-ອອກແບບ ຕ້ອງຜ່ານການປະມູນຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.

3) ໂຄງການສົ່ງເສີມວິຊາການທີ່ບໍ່ຕິດພັນກັບໂຄງການກໍ່ສ້າງ ມີດັ່ງນີ້:

- ໂຄງການຝຶກອົບຮົມ: ແມ່ນໂຄງການຝຶກອົບຮົມຍົກລະດັບຄວາມອາດສາມາດທາງດ້ານວິຊາການຂອງຂະແໜງການຕ່າງໆ, ການຝຶກອົບຮົມການປູກຝັງ, ລ້ຽງສັດ ແລະ ຫັດຖະກຳໃຫ້ປະຊາຊົນ ເຊິ່ງໄລຍະການປະຕິບັດໂຄງການບໍ່ເກີນ 3 ປີ ແລະ ມູນຄ່າໂຄງການບໍ່ເກີນ 500.000.000 (ຫ້າຮ້ອຍລ້ານ) ກີບ;
- ໂຄງການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ: ແມ່ນໂຄງການຄົ້ນຄວ້າພັດທະນາເພື່ອຍົກສູງສະມັດຕະພາບ, ປະສິດທິພາບຂອງການຜະລິດ ແລະ ການບໍລິການ ແລະ ໂຄງການຄົ້ນຄ້ວາຫົວຂໍ້ວິທະຍາ ສາດຮັບໃຊ້ການສ້າງນະໂຍບາຍການພັດທະນາ;
- ໂຄງການສົ່ງເສີມການຜະລິດ: ແມ່ນໂຄງການບໍລິການເຕັກນິກ, ການປຸງແຕ່ງ, ການເກັບຮັກສາ ແລະ ດ້ານການຕະຫຼາດ;
- ໂຄງການສ້າງແຜນແມ່ບົດພັດທະນາເສດຖະກິດ-ສັງຄົມ: ແມ່ນໂຄງການສຳຫຼວດ, ເກັບກຳຂໍ້ມູນສະຖິຕິ, ສ້າງແຜນແມ່ບົດການພັດທະນາ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ;

ນອກຈາກນີ້, ຍັງກວມເຖິງໂຄງການຕິດຕາມ, ກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຄື: ໂຄງການຕິດຕາມ, ກວດກາການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ແຕ່ລະໄລຍະຂອງອົງການທີ່ເຮັດບົດບາດໃນການຄຸ້ມຄອງ ແລະ ກວດກາແຜນການລົງທຶນຂອງລັດ.

ສຳລັບມູນຄ່າໂຄງການໃຫ້ຄິດໄລ່ຕາມມາດຕາ 4 ຂອງຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານລັດ ເລກທີ 4000/ກງ, ລົງວັນທີ 12 ທັນວາ 2018 (ໃນກໍລະນີມີການປັບປຸງໃໝ່ກໍ່ໃຫ້ຖືເອົາສະບັບປັບປຸງໃໝ່ນັ້ນປ່ຽນແທນ).

ສຳລັບໂຄງການຄຸ້ມຄອງໂຄງການ ແລະ ໂຄງການສົ່ງເສີມວິຊາການທີ່ບໍ່ຕິດພັນກັບໂຄງການກໍ່ສ້າງ ພາຍຫຼັງມີການຈັດຕັ້ງປະຕິບັດ ແລະ ໃຊ້ຈ່າຍຕົວຈິງແລ້ວ ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການສະຫຼຸບໜ້າວຽກ ແລະ ການໃຊ້ຈ່າຍເງິນດັ່ງກ່າວ ພ້ອມທັງປະກອບເອກະສານຢັ້ງຢືນ ເພື່ອລາຍງານສະເພາະເປັນແຕ່ລະງວດ ແລະ ພາຍຫຼັງສິ້ນສຸດໂຄງການຕໍ່ເຈົ້າຂອງໂຄງການ ເພື່ອລາຍງານຕໍ່ກະຊວງແຜນການ ແລະ ການລົງທຶນ.

4) ໂຄງການສະໜອງວັດຖຸປະກອນ ມີດັ່ງນີ້:

- ໂຄງການຈັດຊື້ພາຫະນະ ແລະ ວັດຖຸປະກອນຮັບໃຊ້ການຜະລິດ: ຊື້ເຄື່ອງຈັກ ແລະ ພາຫະນະຮັບໃຊ້ການຜະລິດ-ບໍລິການດ້ານກະສິກຳ.
- ໂຄງການຈັດຊື້ເຄື່ອງເຕັກນິກ-ວິຊາການ ແລະ ຊັບສິນ: ໂຄງການຈັດຊື້ເຄື່ອງເຕັກນິກ-ວິຊາການໄດ້ແກ່: ການສະໜອງແນວພັນສັດ-ພືດ, ຝຸ່ນປຸ໋ຍ, ເຄື່ອງມືການແພດ, ເຄື່ອງທົດລອງ-ວິໄຈ, ຊິງຊັ່ງນໍ້າໜັກ, ອຸປະກອນສຳຫຼວດ, ອຸປະກອນພະຍາກອນອາກາດ, ລະບົບສະແກນຄວາມປອດໄພ ແລະ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ. ໂຄງການຈັດຊື້ຊັບສິນໄດ້ແກ່: ທີ່ດິນ, ຕຶກອາຄານສະຖານທີ່ (ເພື່ອມາຮັບໃຊ້ໃຫ້ແກ່ຄວາມຕ້ອງການຂອງລັດ ແລະຂອງສາທາລະນະ).
- ໂຄງການຈັດຊື້ວັດຖຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນີເຈີທີ່ຈຳເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່: ການສະໜອງໂຕະ, ຕັ່ງ, ຕູ້, ກະດານ ແລະ ຜ້າກັ້ງ.

ສຳລັບການຄິດໄລ່ມູນຄ່າໂຄງການສະໜອງວັດຖຸປະກອນ ແມ່ນອີງໃສ່ມາດຖານເຕັກນິກ, ຄຸນນະພາບຂອງວັດຖຸປະກອນ ຕາມລາຄາຕົວຈິງໃນທ້ອງຕະຫຼາດທີ່ມີໃບຢັ້ງຢືນລາຄາໂດຍມີການສົມທຽບລາຄາຢ່າງໜ້ອຍ 3 ແຫ່ງ ໂດຍຖືເອົາລາຄາສະເລ່ຍທີ່ສົມເຫດສົມຜົນເປັນລາຄາຂຶ້ນແຜນ. ສຳລັບຄ່າໃຊ້ຈ່າຍໃນການຝຶກອົບຮົມການນຳໃຊ້ອຸປະກອນໃຫ້ລວມຢູ່ໃນມູນຄ່າຂອງອຸປະກອນ.

ບັນດາໂຄງການສະໜອງວັດຖຸປະກອນ ຕ້ອງຜ່ານການປະມູນຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.

**7. ມາດຕາ 22 ເອກະສານໂຄງການລົງທຶນຂອງລັດ**

ບັນດາເອກະສານທີ່ເຈົ້າຂອງໂຄງການຕ້ອງໄດ້ປະກອບ ເພື່ອນຳສະເໜີໂຄງການເຂົ້າແຜນການລົງທຶນຂອງລັດປະຈຳປີ ຕາມແຕ່ລະປະເພດໂຄງການ ດັ່ງນີ້:

1) ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ມີດັ່ງນີ້:

- ບົດສະເໜີໂຄງການ;
- ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ;
- ບົດລາຍງານການສຳຫຼວດ-ອອກແບບໂຄງການ ແລະ ແບບກໍ່ສ້າງ;
- ໃບຢັ້ງຢືນແບບ ແລະ ມູນຄ່າໂຄງການຂອງຂະແໜງການເຕັກນິກກ່ຽວຂ້ອງ;
- ໃບຢັ້ງຢືນການປະເມີນໂຄງການ;
- ໃບມອບໂອນນຳໃຊ້ທີ່ດິນ ເພື່ອສາທາລະນະປະໂຫຍດໃນກໍລະນີທີ່ມີການນຳໃຊ້ດິນຂອງປະຊາຊົນ;

ສຳລັບໂຄງການປະເພດ I, II ແລະ III ທີ່ນຳໃຊ້ເຕັກນິກສູງ ຕ້ອງປະກອບເອກະສານເພີ່ມເຕີມອີກ ມີດັ່ງນີ້:

- ບົດພັດທະນາໂຄງການ ຫຼື ບົດວິພາກເສດຖະກິດ-ເຕັກນິກ;
- ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

2) ໂຄງການສະໜອງວັດຖຸປະກອນ ມີດັ່ງນີ້:

- ບົດສະເໜີໂຄງການ;
- ໃບປະເມີນລາຄາ;
- ໃບກຳນົດຂໍ້ມູນສະເພາະຂອງວັດຖຸປະກອນ;
- ໃບຢັ້ງຢືນການປະເມີນໂຄງການ.

3) ໂຄງການສົ່ງເສີມວິຊາການ ມີດັ່ງນີ້:

- ບົດສະເໜີໂຄງການ;
- ແຜນດຳເນີນງານ;
- ໃບປະເມີນມູນຄ່າໂຄງການ;
- ໃບຢັ້ງຢືນການປະເມີນໂຄງການ (ສຳລັບໂຄງການກໍ່ສ້າງ ແລະ ສ້ອມແປງທີ່ມີມູນຄ່າບໍ່ເກີນ 5.000.000.000 (ຫ້າຕື້) ກີບ, ຜົນການປະເມີນໂຄງການວ່າຈ້າງທີ່ປຶກສາ ແລະ ໂຄງການຄຸ້ມຄອງໂຄງການ ສາມາດຖືເອົາຕາມໃບຢັ້ງຢືນການປະເມີນໂຄງການກໍ່ສ້າງເລີຍ).

ສຳລັບທຶນສົມທົບຂອງລັດຖະບານ ໃສ່ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາທີ່ຈັດຕັ້ງປະຕິບັດຢູ່ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ເມືອງ ແມ່ນໃຫ້ປະກອບເອກະສານຕາມແຕ່ລະຄຸນລັກສະນະຂອງແຕ່ລະໂຄງການຂ້າງເທິງ ແລະ ຕ້ອງໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ຮັບຜິດຊອບວຽກງານຮ່ວມມືສາກົນຂອງຕົນກ່ອນ ແລ້ວສະເໜີເຖິງກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ເພື່ອຢັ້ງຢືນຄວາມຖືກຕ້ອງ.

**8. ມາດຕາ 33 ເງື່ອນໄຂພື້ນຖານໃນການພິຈາລະນາຮັບຮອງເອົາໂຄງການລົງທຶນຂອງລັດ**

ໃນວັກ 1 ຂໍ້ 1 ໂຄງການລົງທຶນຂອງລັດຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ແລະ ວັກ 2 ໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ມີດັ່ງນີ້:

8.1 ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ: ໝາຍເຖິງອົງການ ສະເໜີໂຄງການລົງທຶນຂອງລັດຕ້ອງໄດ້ຄົ້ນຄວ້າ ແລະ ນຳສະເໜີໂຄງການລົງທຶນຂອງລັດທີ່ສະໜັບສະໜູນໃຫ້ບັນດາເປົ້າໝາຍການພັດທະນາຂອງຕົນ ແລະ ຕ້ອງໄດ້ສົ່ງແຜນພັດທະນາຂະແໜງການ ຫຼື ທ້ອງຖິ່ນຂອງຕົນມາພ້ອມກັບຮ່າງແຜນລົງທຶນຂອງລັດປະຈຳປີ ໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອເປັນບ່ອນອີງໃນການຄົ້ນຄວ້າພິຈາລະນາເອົາໂຄງການເຂົ້າແຜນຢ່າງສອດ ຄ່ອງ ແລະ ສະໜັບສະໜູນແຕ່ລະເປົ້າໝາຍຂອງການພັດທະນາ. ການຈັດສັນງົບປະມານໃສ່ ແຕ່ລະໂຄງການ ຕ້ອງມີຄວາມສອດຄ່ອງກັບງົບປະມານປະຈຳປີທີ່ຕົນໄດ້ຮັບ ເພື່ອຮັບປະກັນການ ຊຳລະໃຫ້ໄປຕາມມາດຕາ 19 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

8.2 ໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ: ໝາຍເຖິງ ບັນດາໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາທີ່ຕ້ອງໄດ້ຢັ້ງຢືນແຫຼ່ງທຶນຈະແຈ້ງກ່ອນ ຈຶ່ງສາມາດກຳນົດເອົາໂຄງ

ການນັ້ນເຂົ້າໃນ ແຜນການລົງທຶນຂອງລັດ ມີດັ່ງນີ້:

- ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ໄດ້ສຶກສາຄວາມເປັນໄປໄດ້, ມີສັນຍາລະຫວ່າງລັດຖະບານກັບຜູ້ໃຫ້ທຶນ ແລະ ຢັ້ງຢືນຄວາມຖືກຕ້ອງຈາກ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ຈຶ່ງສາມາດສະເໜີເຂົ້າແຜນການລົງທຶນຂອງລັດ;
- ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາຂອງແຂວງ, ນະຄອນຫຼວງ ແລະ ເມືອງ ທີ່ໄດ້ຜ່ານການອະນຸມັດໃຫ້ປະຕິບັດຈາກລັດຖະບານ ຜ່ານແຜນການຊ່ວຍເຫຼືອທາງການເພື່ອການພັດທະນາຂອງກະຊວງແຜນການ ແລະ ການລົງທຶນ ແລະ ຜ່ານກະຊວງ, ອົງການລັດທ່ຽບເທົ່າກະຊວງ ຫຼື ຕາມສັນຍາຊ່ວຍເຫຼືອພິເສດຂອງແຂວງແຮກສ່ຽວກ່ຽວຂ້ອງຂອງ ສສ ຫວຽດນາມ ຫຼື ສປ ຈີນ ຕ້ອງຜ່ານການຢັ້ງຢືນຄວາມຖືກຕ້ອງຈາກພະແນກແຜນການ ແລະ ການລົງທຶນແຂວງ (ຂະແໜງຮ່ວມມືສາກົນ) ຈຶ່ງສາມາດບັນຈຸເຂົ້າແຜນການລົງທຶນຂອງລັດ ເພື່ອນຳສະເໜີທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ.

1.3 ສຳລັບບັນດາເອກະສານທີ່ຕິດພັນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ມີດັ່ງນີ້:

1) ແຈ້ງການອະນຸມັດຮັບເອົາໂຄງການຊ່ວຍເຫຼືອລ້າຈາກລັດຖະບານ ໂດຍການສະເໜີຂອງກະຊວງແຜນການ ແລະ ການລົງທຶນ;
2) ເອກະສານໂຄງການຊ່ວຍເຫຼືອລ້າທີ່ຕິດພັນກັບການປະຕິບັດໂຄງການເງິນກູ້ຢືມເງື່ອນໄຂຜ່ອນຜັນທີ່ໄດ້ຮັບການອະນຸມັດຜ່ານກະຊວງການເງິນ;
3) ເອກະສານໂຄງການທີ່ຜ່ານອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ໄດ້ຮັບການອະນຸມັດຜ່ານກະຊວງການຕ່າງປະເທດ;
4) ເອກະສານໂຄງການທີ່ຜ່ານອົງການຈັດຕັ້ງທາງສັງຄົມ ໄດ້ຮັບການອະນຸມັດຜ່ານກະຊວງພາຍໃນ;
5) ເອກະສານໂຄງການກູ້ຢືມເງື່ອນໄຂຜ່ອນຜັນທີ່ໄດ້ຮັບການອະນຸມັດຜ່ານກະຊວງການເງິນ;
6) ເອກະສານສັນຍາໂຄງການຊ່ວຍເຫຼືອລະຫວ່າງຜູ້ຈັດຕັ້ງປະຕິບັດກັບຜູ້ໃຫ້ທຶນ ທີ່ລັດຖະບານອະນຸມັດ;
7) ແບບຟອມຂໍ້ມູນໂຄງການແບບກະທັດຮັດ (SPIS);
8) ເອກະສານທີ່ກ່ຽວຂ້ອງກັບການຄຸ້ມຄອງບໍລິຫານໂຄງການ ມີດັ່ງນີ້:
   - ຄູ່ມືການຄຸ້ມຄອງບໍລິຫານໂຄງການ ຫຼື ແຜນວຽກ ແລະ ແຜນງົບປະມານຂອງໂຄງການຕະຫຼອດອາຍຸໂຄງການທີ່ມີການເຊັນຮັບຮອງໂດຍຜູ້ໃຫ້ທຶນ;
   - ບົດບັນທຶກກອງປະຊຸມຮ່ວມກັບຜູ້ໃຫ້ທຶນໃນກໍລະນີມີການດັດແປງ, ດັດແກ້ ຫຼື ສະເໜີໃຫ້ມີການປະກອບທຶນສົມທົບ;
9) ເອກະສານໂຄງການ;

10) ເອກະສານຕ່າງໆທີ່ກ່ຽວຂ້ອງກັບປະເພດທຶນສົມທົບ ຫຼື ໂຄງການສົມທົບທີ່ເປັນໂຄງການລົງທຶນຂອງລັດ;

11) ເອກະສານແຜນດຳເນີນງານປະຈຳປີ.

ບັນດາໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ຕ້ອງການທຶນສົມທົບຈາກລັດຖະບານ ຕ້ອງໄດ້ລະບຸແຈ້ງໃນເອກະສານຂໍອະນຸມັດໂຄງການ, ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາທີ່ໄດ້ເຊັນກັນ ແລະ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຈາກກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ສຳລັບໂຄງການຂອງກະຊວງ, ອົງການລັດທຽບເທົ່າກະຊວງ; ສ່ວນໂຄງການຂອງແຂວງ, ນະຄອນຫຼວງ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຈາກພະແນກແຜນການ ແລະ ການລົງທຶນແຂວງ (ຂະແໜງຮ່ວມມືສາກົນ).

ໃນກໍລະນີໂຄງການຂຶ້ນຢູ່ກະຊວງຄຸ້ມຄອງແຕ່ຈັດຕັ້ງປະຕິບັດຢູ່ແຂວງ ແລະ ຕ້ອງການໃຫ້ແຂວງຂຶ້ນແຜນທຶນສົມທົບແມ່ນໃຫ້ກະຊວງທີ່ໄດ້ຮັບທຶນປະສານກັບ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ແລະ ແຂວງທີ່ຈະປະຕິບັດໂຄງການ ເພື່ອເອກະພາບກັນໃນການຂຶ້ນແຜນສົມທົບທຶນແຕ່ຫົວທີ ເພື່ອຫຼີກລ້ຽງການຂຶ້ນແຜນຊ້ຳຊ້ອນ ຫຼື ບໍ່ມີພາກສ່ວນໃດຂຶ້ນແຜນເລີຍ;

ສຳລັບເອກະສານ ເພື່ອກວດກາ ແລະ ຢັ້ງຢືນທຶນສົມທົບທີ່ປະກອບມາຂ້າງເທິງແມ່ນຈະຖືກນຳໃຊ້ເພື່ອເປັນບ່ອນອີງພິຈາລະນາປະກອບທຶນສົມທົບ. ພາຍຫຼັງໄດ້ຮັບການອະນຸມັດແລ້ວ (ມີລະຫັດປະຈຳຕົວໂຄງການ) ໃນແຕ່ລະປີຕໍ່ໜ້າແມ່ນໃຫ້ປະກອບບົດລາຍງານການນຳໃຊ້ທຶນສົມທົບ ພ້ອມດ້ວຍແຜນຄວາມຕ້ອງການນຳໃຊ້ທຶນສົມທົບແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ສຳລັບໂຄງການທີ່ສູນກາງຄຸ້ມຄອງ ແລະ ພະແນກແຜນການ ແລະ ການລົງທຶນແຂວງ (ຂະແໜງຮ່ວມມືສາກົນ) ສຳລັບໂຄງການທີ່ທ້ອງຖິ່ນຄຸ້ມຄອງ, ກ່ອນວັນທີ 15 ພຶດສະພາ ເພື່ອຢັ້ງຢືນ ແລະ ສະເໜີເອົາເຂົ້າແຜນ;

ທຸກໂຄງການທີ່ມີທຶນສົມທົບຂອງລັດຖະບານ ຕໍ່ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ມີລະຫັດໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາແລ້ວ ໃຫ້ເຈົ້າຂອງໂຄງການປະກອບຂໍ້ມູນເຂົ້າໃນລະບົບ (ODA-MIS.GOV.LA) ພ້ອມທັງສຳເນົາເອກະສານ (ດັ່ງທີ່ລະບຸໄວ້ຂ້າງເທິງ) ເຂົ້າໃນລະບົບຖານຂໍ້ມູນເພື່ອເປັນບ່ອນອີງໃນການຢັ້ງຢືນຖືກຕ້ອງ.

## 9. ມາດຕາ 34 ການປະເມີນ ແລະ ອົງການປະເມີນໂຄງການລົງທຶນຂອງລັດ

ອົງການຮັບຜິດຊອບປະເມີນໂຄງການລົງທຶນຂອງລັດ ປະກອບດ້ວຍ 2 ຂັ້ນ ຄື:

- ຂັ້ນສູນກາງແມ່ນ: ກະຊວງແຜນການ ແລະ ການລົງທຶນ (ກົມປະເມີນຜົນ);
- ຂັ້ນແຂວງ, ນະຄອນຫຼວງແມ່ນ: ພະແນກແຜນການ ແລະ ການລົງທຶນ (ຂະແໜງປະເມີນຜົນ);

ການປະເມີນແມ່ນນຳໃຊ້ 5 ມາດຖານຕາມຫຼັກວິຊາການຂອງການປະເມີນໂຄງການລົງທຶນຂອງລັດໂດຍເນັ້ນໃສ່ຄວາມສອດຄ່ອງ, ປະສິດທິພາບ, ປະສິດທິຜົນ, ຜົນກະທົບ ແລະ ຄວາມຍືນຍົງ, ເຊິ່ງມີຂັ້ນຕອນ ແລະ ວິທີການໃນການປະເມີນ ມີດັ່ງນີ້:

9.1 ຄວາມຮັບຜິດຊອບຂອງອົງການສະເໜີໂຄງການ (ອົງການທີ່ໄດ້ຮັບມອບສິດຈາກເຈົ້າຂອງໂຄງການ):

ອົງການສະເໜີໂຄງການມີຄວາມຮັບຜິດຊອບໂດຍກົງໃນການສ້າງເອກະສານໂຄງການລົງທຶນ ລັດ ແລະ ປະກອບເອກະສານໂຄງການໃຫ້ຄົບຖ້ວນຕາມ ຂໍ້ 9.7 ຂອງຄຳແນະນຳສະບັບນີ້.

9.2 ຄວາມຮັບຜິດຊອບຂອງຂະແໜງການຄຸ້ມຄອງເຕັກນິກທີ່ກ່ຽວຂ້ອງ ມີດັ່ງນີ້:

- ຢັ້ງຢືນແບບແຕ້ມເຕັກນິກກໍ່ສ້າງ-ສ້ອມແປງ, ບໍລິມາດວຽກ ແລະ ມູນຄ່າໂຄງການຕາມການຕົກລົງແບ່ງຂັ້ນຄຸ້ມຄອງ;
- ຢັ້ງຢືນຄວາມຖືກຕ້ອງບັນດາໜ້າວຽກ ແລະ ມູນຄ່າຂອງໂຄງການສຶກສາຄວາມເປັນໄປໄດ້, ໂຄງ ການສຳຫຼວດ-ອອກແບບ ແລະ ໂຄງການວ່າຈ້າງທີ່ປຶກສາ;
- ຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກ ຫຼື ບົດພັດທະນາໂຄງການ;
- ຢັ້ງຢືນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເບື້ອງຕົ້ນທີ່ບໍ່ມີຜົນກະທົບຮ້າຍແຮງແມ່ນອົງການສະເໜີໂຄງການເປັນຜູ້ຢັ້ງຢືນ, ແຕ່ຖ້າໂຄງການໃດຫາກມີຜົນກະທົບຮ້າຍແຮງແມ່ນຕ້ອງໄດ້ຜ່ານການຢັ້ງຢືນ ຈາກຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

9.3 ຂອບເຂດຂອງການຍົກເວັ້ນ ມີດັ່ງນີ້:

1) ຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ໂຄງການລົງທຶນຂອງລັດຂອງຂະແໜງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບທີ່ມີລັກ ສະນະສະເພາະດ້ວຍເຫດຜົນດ້ານຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຊາດແມ່ນຈະບໍ່ໄດ້ຜ່ານຂະບວນການປະເມີນໂຄງການ ໂດຍມີການຕົກລົງອະນຸມັດຈາກປະທານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນສູນກາງ.

ສຳລັບໂຄງການສະໜອງວັດຖຸປະກອນ ແລະ ໂຄງການກໍ່ສ້າງ-ສ້ອມແປງເສັ້ນທາງ, ການກໍ່ສ້າງ-ສ້ອມແປງອາຄານສຳນັກງານຫ້ອງການ, ໂຮງຮຽນ, ໂຮງໝໍ, ເຮືອນພັກ, ອາຄານຫໍພັກ ແລະ ໂຄງການອື່ນໆ ທີ່ຈະຜ່ານການຮັບຮອງຈາກສະພາແຫ່ງຊາດຕ້ອງໄດ້ຜ່ານການປະເມີນ ຈາກອົງ ການຮັບຜິດຊອບການປະເມີນໂຄງການລົງທຶນຂອງລັດຕາມມາດຕາ 34 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

2) ໂຄງການແກ້ໄຂໄພພິບັດສຸກເສີນ

ສຳລັບການແກ້ໄຂໄພພິບັດສຸກເສີນ ແມ່ນບໍ່ຈຳເປັນປະເມີນໂຄງການ ແຕ່ຕ້ອງໄດ້ຜ່ານການກວດກາຄວາມຖືກຕ້ອງ ແລະ ຢັ້ງຢືນຈາກຄະນະຄຸ້ມຄອງໄພພິບັດແຕ່ລະຂັ້ນ ແລະ ໄດ້ຮັບການຕົກລົງຈາກອົງການທີ່ມີສິດອຳນາດຕາມນິຕິກຳທີ່ກ່ຽວຂ້ອງ.

9.4 ໂຄງການທີ່ນຳໃຊ້ງົບປະມານກອງທຶນທາງ.

ບັນດາໂຄງການທີ່ນຳໃຊ້ງົບປະມານກອງທຶນທາງ ຕ້ອງໄດ້ຜ່ານການປະເມີນ ຈາກອົງການຮັບຜິດຊອບການປະເມີນໂຄງການລົງທຶນຂອງລັດຕາມມາດຕາ 34 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

9.5 ການປະເມີນໂຄງການຟື້ນຟູຫຼັງໄພພິບັດ.

ບັນດາໂຄງການຟື້ນຟູຫຼັງໄພພິບັດ ຕ້ອງໄດ້ຜ່ານການກວດກາຄວາມຖືກຕ້ອງຊັດເຈນ ແລະ ຢັ້ງຢືນຈາກຄະນະຄຸ້ມຄອງໄພພິບັດແຕ່ລະຂັ້ນ, ຕ້ອງໄດ້ນຳເອົາແບບແຕ້ມເຕັກນິກການກໍ່ສ້າງ ແລະ ມູນຄ່າໄປຜ່ານການຢັ້ງຢືນຈາກຂະແໜງເຕັກນິກທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕ້ອງໄດ້ຜ່ານການປະເມີນ ຈາກອົງການຮັບຜິດຊອບການປະເມີນໂຄງການລົງທຶນຂອງລັດຕາມມາດຕາ 34 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ກ່ອນສະເໜີພິຈາລະນາເຂົ້າແຜນການລົງທຶນຂອງລັດປະຈຳປີ.

9.6 ການປະເມີນໂຄງການຊ່ວຍເຫຼືອທາງການ ເພື່ອການພັດທະນາທີ່ຕ້ອງການທຶນສົມທົບຈາກລັດຖະບານ ມີດັ່ງນີ້:

1) ສົມທົບເປັນທຶນເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ.

ໃນຂັ້ນຕອນການຄົ້ນຄວ້ານຳສະເໜີລັດຖະບານ ເພື່ອພິຈາລະນາຮັບເອົາໂຄງການຊ່ວຍ ເຫຼືອທາງການເພື່ອການພັດທະນາ ທີ່ຕ້ອງການທຶນສົມທົບຈາກລັດຖະບານ ແມ່ນຖືເອົາການປະເມີນໂຄງການຂອງຄະນະຊ່ຽວຊານຕ່າງປະເທດ ແລະ ວິຊາການຝ່າຍລາວເຮັດວຽກຮ່ວມກັນ ໂດຍອົງການປະເມີນຜົນ ຕ້ອງໄດ້ເຂົ້າຮ່ວມໃນຄະນະກະກຽມສ້າງໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາແຕ່ຫົວທີ ໂດຍບໍ່ຈຳເປັນຕ້ອງປະເມີນທຶນສົມທົບສະເພາະອີກ.

2) ສົມທົບເປັນໂຄງການເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ.

ການສົມທົບເປັນໂຄງການ ເຂົ້າໃນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາໃຫ້ປະຕິບັດການປະເມີນຕາມຂໍ້ 9 ແລະ ຂໍ້ 9.8 ຂອງຄຳແນະນຳສະບັບນີ້.

9.7 ການປະກອບເອກະສານໂຄງການລົງທຶນຂອງລັດ ເພື່ອສະເໜີປະເມີນໂຄງການລົງທຶນຂອງລັດ.

ການປະກອບເອກສານໂຄງການລົງທຶນຂອງລັດ ເພື່ອສະເໜີປະເມີນໂຄງການໂດຍໃຫ້ສອດຄ່ອງກັບຄຸນລັກສະນະຂອງແຕ່ລະໂຄງການ ໃນການດຳເນີນການປະເມີນຕາມຫຼັກວິຊາການໃຫ້ປະກອບ ດັ່ງນີ້:

9.7.1 ການປະກອບເອກະສານໂຄງການສະເໜີໃໝ່ ມີດັ່ງນີ້:

1) ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ມີດັ່ງນີ້:

- ບົດສະເໜີໂຄງການ (ຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ);
- ບົດລາຍງານການສຳຫຼວດ-ອອກແບບ;
- ແບບແຕ້ມເຕັກນິກການກໍ່ສ້າງ (ແບບລະອຽດ) ທີ່ຜ່ານການກວດກາ ແລະ ຢັ້ງຢືນຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ;
- ໃບປະເມີນລາຄາທີ່ໄດ້ຜ່ານການເຊັນຢັ້ງຢືນມູນຄ່າໂຄງການຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ;
- ບົດປະກອບຄຳເຫັນຂອງຂະແໜງການເຕັກນິກທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ.

ຖ້າເປັນໂຄງການປະເພດ I, II ແລະ III ຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້: (1). ບົດພັດທະນາໂຄງການ ຫຼື ບົດວິພາກເສດຖະກິດເຕັກນິກ; (2). ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

ສໍາລັບໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ທີ່ມີມູນຄ່າແຕ່ 5.000.000.000 (ຫ້າຕື້) ກີບລົງມາ ໃຫ້ປະກອບ ດັ່ງນີ້:

- ບົດສະເໜີໂຄງການ (ຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ);
- ແບບແຕ້ມເຕັກນິກການກໍ່ສ້າງທີ່ຜ່ານການກວດກາ ແລະ ຢັ້ງຢືນຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງ;
- ໃບປະເມີນລາຄາທີ່ໄດ້ຜ່ານການເຊັນຢັ້ງຢືນມູນຄ່າໂຄງການຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ;
- ບົດປະກອບຄໍາເຫັນຂອງຂະແໜງການເຕັກນິກທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ.

ສໍາລັບຄ່າໃຊ້ຈ່າຍຂອງໂຄງການສົ່ງເສີມວິຊາການທີ່ຕິດພັນກັບການກໍ່ສ້າງ ຫຼື ສ້ອມແປງທີ່ມີມູນຄ່າແຕ່ 5.000.000.000 (ຫ້າຕື້) ກີບລົງມາ ແມ່ນໃຫ້ຄັດຕິດໃບປະເມີນລາຄາມາພ້ອມກັບເອກະສານໂຄງການກໍ່ສ້າງ ຫຼື ສ້ອມແປງໂດຍບໍ່ຈໍາເປັນຕ້ອງຂຽນບົດສະເໜີໂຄງການ ແລະ ສ້າງແຜນດໍາເນີນງານຕື່ມອີກ.

2) ໂຄງການສົ່ງເສີມວິຊາການທີ່ຕິດພັນ, ບໍ່ຕິດພັນກັບໂຄງການກໍ່ສ້າງ ແລະ ໂຄງການສະໜອງວັດຖຸປະກອນ ປະກອບມີ:

- ບົດສະເໜີໂຄງການ;
- ແຜນດໍາເນີນງານ;
- ໃບປະເມີນລາຄາ;
- ໃບກໍານົດຂໍ້ມູນສະເພາະຂອງວັດຖຸປະກອນ(ສໍາລັບໂຄງການສະໜອງວັດຖຸປະກອນ).

ສໍາລັບໂຄງການຊົດເຊີຍ ແລະ ເວນຄືນສິ່ງກີດຂວາງ ເປັນຕົ້ນ: ທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກຕ້ອງໄດ້ເຮັດເປັນໂຄງການສົ່ງເສີມວິຊາການຕ່າງຫາກ ແລະ ປະກອບເອກະສານໃຫ້ຖືກຕ້ອງ ຕາມລະບຽບການ ເປັນຕົ້ນ: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງວ່າດ້ວຍການຮັບຮອງເອົາມູນຄ່າທົດແທນຄ່າເສຍຫາຍ ທີ່ມີການຢັ້ງຢືນຈາກຄະນະກໍາມະການສະເພາະກິດທີ່ກ່ຽວຂ້ອງ ແລະ ເຈົ້າຂອງກໍາມະສິດ.

9.7.2 ການປະກອບເອກະສານ ເພື່ອປະເມີນຜົນໂຄງການໄລຍະຈັດຕັ້ງປະຕິບັດ (ໂຄງການສືບຕໍ່).

ການປະກອບເອກະສານ ເພື່ອປະເມີນຜົນໂຄງການໄລຍະຈັດຕັ້ງປະຕິບັດ (ໂຄງການສືບຕໍ່) ສໍາລັບໂຄງການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ມີດັ່ງນີ້:

- ບົດລາຍງານຄວາມຄືບໜ້າໂຄງການ (ຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ);
- ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບໂຄງການ;

- ຂໍ້ຕົກລົງອະນຸມັດໃຫ້ຈັດຕັ້ງປະຕິບັດໂຄງການ ຫຼື ໃບມອບສິດໃຫ້ຈັດຕັ້ງປະຕິບັດໂຄງການຂອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ບົດບັນທຶກການປະມູນ;
- ໃບສັ່ງວຽກ;
- ສັນຍາການກໍ່ສ້າງ;
- ບົດບັນທຶກກວດກາໜ້າວຽກທີ່ປະຕິບັດວຽກສຳເລັດຄັ້ງຫຼ້າສຸດ;
- ຂໍ້ມູນການຊຳລະຜ່ານມາ.

9.7.3 ການປະກອບເອກະສານ ເພື່ອປະເມີນຜົນໂຄງການໄລຍະສຳເລັດ 100% (ກ່ອນການມອບ-ຮັບ) ໃຫ້ປະກອບ ດັ່ງນີ້:

1) ໂຄງການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ມີດັ່ງນີ້:
   - ບົດລາຍງານສຳເລັດ 100% (ຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ);
   - ບົດບັນທຶກກວດກາວຽກສຳເລັດ 100%;
   - ໃບມອບ-ຮັບຊົ່ວຄາວ;
   - ຂໍ້ມູນການຊຳລະຜ່ານມາ.
2) ສຳລັບໂຄງການສິ່ງເສີມວິຊາການ ແລະ ສະໜອງວັດຖຸປະກອນໃຫ້ປະກອບ 3 ເອກະສານ ມີດັ່ງນີ້:
   - ບົດລາຍງານສຳເລັດ 100% (ຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ);
   - ຂໍ້ຕົກລົງອະນຸມັດໃຫ້ຈັດຕັ້ງປະຕິບັດໂຄງການ ຫຼື ໃບມອບສິດໃຫ້ຈັດຕັ້ງປະຕິບັດໂຄງການຂອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
   - ຂໍ້ມູນການຊຳລະຜ່ານມາ.

9.7.4 ການປະກອບເອກະສານ ເພື່ອປະເມີນຜົນໂຄງການພາຍຫຼັງການນຳໃຊ້ໂຄງການແຕ່ 2-5 ປີ ໃຫ້ປະກອບ ດັ່ງນີ້:

- ບົດບັນທຶກການມອບ-ຮັບໂຄງການຖາວອນ;
- ໃບມອບ-ຮັບຖາວອນ;
- ບົດລາຍງານການນຳໃຊ້ໂຄງການ.

9.8 ການປະເມີນໂຄງການລົງທຶນຂອງລັດ ມີດັ່ງນີ້:

9.8.1 ການປະເມີນໂຄງການກ່ອນນຳສະເໜີເຂົ້າແຜນການລົງທຶນຂອງລັດ ມີດັ່ງນີ້:

ການປະເມີນໂຄງການລົງທຶນຂອງລັດ ກ່ອນນຳສະເໜີເຂົ້າແຜນການລົງທຶນຂອງລັດ ແມ່ນການປະເມີນຄວາມເປັນໄປໄດ້, ຄວາມເໝາະສົມ, ຄວາມຈຳເປັນ, ຄວາມພ້ອມໃນ

ການສະໜັບສະໜູນທາງດ້ານຊັບພະຍາກອນ ແລະ ຄວາມພ້ອມທາງດ້ານການບໍລິຫານໂຄງການ ໂດຍຄົ້ນຄວ້າພິຈາລະນາການປະເມີນໂຄງການສົ່ງເສີມວິຊາການທີ່ຕິດພັນ ແລະ ບໍ່ຕິດພັນກັບການກໍ່ສ້າງ, ໂຄງ ການສະໜອງວັດຖຸປະກອນ ແລະ ໂຄງການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ເປັນການປະເມີນທີ່ນໍາໃຊ້ 5 ມາດຖານຕາມຫຼັກວິຊາການຂອງການປະເມີນໂຄງການລົງທຶນຂອງລັດ ໂດຍເນັ້ນໃສ່ຄວາມສອດຄ່ອງ, ປະສິດທິພາບ, ປະສິດທິຜົນ ຜົນກະທົບ ແລະ ຄວາມຍືນຍົງ.

ໃນກໍລະນີອົງການປະເມີນເຫັນວ່າໂຄງການທີ່ສະເໜີມາຫາກອາດສົ່ງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຮ້າຍແຮງ ຫຼື ການກໍານົດພື້ນທີ່ໂຄງການເຫັນວ່າບໍ່ຊັດເຈນ, ອົງການປະເມີນເປັນເຈົ້າການໃນການປະສານສົມທົບກັບອົງການສະເໜີໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງດໍາເນີນການລົງເກັບກໍາຂໍ້ມູນເພີ່ມເຕີມຢູ່ຈຸດທີ່ຕັ້ງໂຄງການເພື່ອເປັນເງື່ອນໄຂໃນການພິຈາລະນາຄົ້ນຄວ້າ ແລະ ປະເມີນໂຄງການກ່ອນສະເໜີເຂົ້າແຜນການລົງທຶນຂອງລັດ.

9.8.2 ການປະເມີນຜົນໂຄງການໄລຍະຈັດຕັ້ງປະຕິບັດ (ໂຄງການສືບຕໍ່) ມີດັ່ງນີ້:

ການປະເມີນໃນໄລຍະກາງຂອງການປະຕິບັດສັນຍາ ໃຫ້ດໍາເນີນການພາຍຫຼັງໂຄງການໄດ້ຮັບການຈັດຕັ້ງປະຕິບັດໄລຍະໃດໜຶ່ງ ເພື່ອຕິດຕາມ, ກວດກາຄວາມຄືບໜ້າ, ຄວາມສອດຄ່ອງຂອງການຈັດຈັ້ງປະຕິບັດກັບເອກະສານໂຄງການ ເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຂໍ້ກໍານົດຕ່າງໆຕາມເອກະສານໂຄງການ.

ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ຕ້ອງໄດ້ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ພ້ອມທັງປະກອບເອກະສານໃຫ້ຄົບຊຸດຕາມທີ່ກໍານົດໄວ້ໃນຄໍາແນະນໍາສະບັບນີ້ ແລະ ນໍາສົ່ງໃຫ້ອົງການທີ່ມີສິດປະເມີນໂຄງການລົງທຶນຂອງລັດ ເພື່ອດໍາເນີນການປະເມີນຕາມຫຼັກວິຊາການ.

ອົງການປະເມີນໂຄງການລົງທຶນຂອງລັດ ເປັນເຈົ້າການສ້າງແຜນສົມທົບກັບອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ, ຄະນະຮັບຜິດຊອບໂຄງການ ແລະ ພາກສ່ວນເຕັກນິກທີ່ກ່ຽວຂ້ອງດໍາເນີນການປະເມີນດ້ານເອກະສານໂຄງການ ແລະ ລົງພາກສະໜາມຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

9.8.3 ການປະເມີນຜົນໂຄງການໄລຍະສໍາເລັດ 100% (ກ່ອນການມອບ-ຮັບ) ມີດັ່ງນີ້:

ແມ່ນດໍາເນີນການພາຍຫຼັງໂຄງການໄດ້ຮັບການຈັດຕັ້ງປະຕິບັດສໍາເລັດ 100% ເພື່ອຕິດຕາມ, ກວດກາໜ້າວຽກຕົວຈິງ, ສະຫຼຸບຕີລາຄາແຕ່ລະດ້ານສົມທຽບໃສ່ແຜນດໍາເນີນງານ ແລະ ເອກະສານໂຄງການ;

ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ຕ້ອງໄດ້ປະກອບເອກະສານລາຍງານຜົນສໍາເລັດໂຄງການ (ຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ) ເຖິງອົງການປະເມີນໂຄງການລົງທຶນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 34 ແລະ 71 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ;

ອົງການປະເມີນໂຄງການລົງທຶນຂອງລັດ ເປັນເຈົ້າການສ້າງແຜນສົມທົບກັບອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ, ຄະນະຮັບຜິດຊອບໂຄງການ ແລະ ພາກສ່ວນເຕັກນິກທີ່

ກ່ຽວຂ້ອງດຳເນີນການປະເມີນດ້ານເອກະສານໂຄງການ ແລະ ລົງພາກສະໜາມຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ;

ສຳລັບການປະເມີນຜົນໂຄງການສົ່ງເສີມວິຊາການທີ່ບໍ່ຕິດພັນກັບການກໍ່ສ້າງ ແລະ ສະໜອງວັດຖຸປະກອນ ແມ່ນຈະດຳເນີນການປະເມີນໃນໄລຍະກ່ອນການເຂົ້າແຜນ ແລະ ໃນໄລຍະສຳເລັດ 100% ເທົ່ານັ້ນ.

9.8.4 ການປະເມີນຜົນໄລຍະການນຳໃຊ້ໂຄງການ ມີດັ່ງນີ້:

ພາຍຫຼັງທີ່ໂຄງການໄດ້ມອບ-ຮັບ ແລະ ນຳໃຊ້ແລ້ວ 2-5 ປີ ຈະໄດ້ດຳເນີນການປະເມີນຜົນຕາມທີ່ໄດ້ລະບຸໄວ້ໃນມາດຕາ 34 ແລະ 73 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ເພື່ອຕິດຕາມການຄຸ້ມຄອງນຳໃຊ້ ໃຫ້ສອດຄ່ອງຕາມເປົ້າໝາຍໂຄງການ, ປະສິດທິຜົນ, ຜົນໄດ້ຮັບຂອງໂຄງການ ແລະ ເພື່ອຖອດຖອນບົດຮຽນໃນການສ້າງໂຄງການໃນຕໍ່ໜ້າ.

ອົງການຄຸ້ມຄອງນຳໃຊ້ໂຄງການຕ້ອງໄດ້ແຕ່ງຕັ້ງຄະນະຮັບຜິດຊອບ ເພື່ອສົມທົບກັບອົງການປະເມີນໂຄງການລົງທຶນຂອງລັດ ເພື່ອດຳເນີນການປະເມີນຜົນໂຄງການ, ລາຍງານຜົນການນຳໃຊ້ໂຄງການພ້ອມທັງປະກອບເອກະສານໃຫ້ຄົບຊຸດ ຕາມທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ແລະ ນຳສົ່ງໃຫ້ອົງການທີ່ມີສິດປະເມີນ ເພື່ອດຳເນີນການປະເມີນຜົນຕາມຫຼັກວິຊາການ.

ອົງການປະເມີນໂຄງການລົງທຶນຂອງລັດ ເປັນເຈົ້າການສ້າງແຜນສົມທົບກັບອົງການຄຸ້ມຄອງນຳໃຊ້ໂຄງການ, ພາກສ່ວນທີ່ຖືກແຕ່ງຕັ້ງ, ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ພາກສ່ວນເຕັກນິກທີ່ກ່ຽວຂ້ອງດຳເນີນການປະເມີນຜົນດ້ານເອກະສານໂຄງການ ແລະ ລົງພາກສະໜາມຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

ການປະເມີນຜົນໄລຍະການນຳໃຊ້ໂຄງການແຕ່ 2-5 ປີ, ສຳລັບໂຄງການປະເພດ V ທີ່ຂຶ້ນກັບຄວາມຮັບຜິດຊອບຂອງແຂວງ, ນະຄອນຫຼວງວຽງຈັນ ທີ່ມີມູນຄ່າແຕ່ 10.000.000.000 (ສິບຕື້) ກີບຂຶ້ນໄປ ໃຫ້ອົງການປະເມີນຂັ້ນທ້ອງຖິ່ນສົມທົບກັບພາກສ່ວນທີ່ກ່ຽວຂ້ອງດຳເນີນການປະເມີນຜົນ ເພື່ອເປັນບ່ອນອີງໃນການຖອດຖອນບົດຮຽນໃນການຄຸ້ມຄອງ, ນຳໃຊ້ ແລະ ການສ້າງໂຄງການໃນລັກສະນະດຽວກັນໃນອານາຄົດ.

9.9 ການຮັບຮອງຜົນການປະເມີນ, ການອອກໃບຢັ້ງຢືນ ແລະ ການນຳໃຊ້ຜົນການປະເມີນ.

9.9.1 ການຮັບຮອງຜົນການປະເມີນ ມີດັ່ງນີ້:

ຜົນຂອງການປະເມີນໂຄງການລົງທຶນຂອງລັດ ຕ້ອງໄດ້ຜ່ານການຮັບຮອງຈາກຄະນະຮັບຮອງຜົນການປະເມີນຕາມການແບ່ງຂັ້ນຄຸ້ມຄອງ ມີດັ່ງນີ້:

- ຂັ້ນສູນກາງ: ຄະນະຮັບຮອງຜົນການປະເມີນຂັ້ນສູນກາງແຕ່ງຕັ້ງໂດຍລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຕາມການສະເໜີຂອງກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ ເຊິ່ງຄະນະດັ່ງກ່າວປະກອບດ້ວຍ: ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນປະທານ, ຫົວໜ້າກົມປະເມີນຜົນ ເປັນຮອງປະທານ ທັງເປັນຜູ້ປະຈຳການ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມປະເມີນຜົນ, ຮອງຫົວໜ້າກົມ

ແຜນການ, ຮອງຫົວໜ້າກົມກວດກາ ກະຊວງແຜນການ ແລະ ການລົງທຶນ, ຮອງຫົວໜ້າກົມຂອງບັນດາກະຊວງຄຸ້ມຄອງເຕັກນິກທີ່ກ່ຽວຂ້ອງ ເປັນຄະນະ ແລະ ປະກອບມີກອງເລຂາປະຈໍາການ;

- ຂັ້ນແຂວງ, ນະຄອນຫຼວງ: ຄະນະຮັບຮອງຜົນການປະເມີນຂັ້ນແຂວງ, ນະຄອນຫຼວງ ແຕ່ງຕັ້ງໂດຍເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງພະແນກແຜນການ ແລະ ການລົງທຶນ ເຊິ່ງຄະນະດັ່ງກ່າວປະກອບດ້ວຍ: ຫົວໜ້າພະແນກແຜນການ ແລະ ການລົງທຶນ ເປັນປະທານຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ຜູ້ຊີ້ນໍາວຽກງານປະເມີນຜົນເປັນຮອງປະທານ ທັງເປັນຜູ້ປະຈໍາການ, ຫົວໜ້າຫ້ອງການ, ຫົວໜ້າຂະແໜງປະເມີນຜົນ, ຫົວໜ້າຂະແໜງແຜນການ ແລະ ຫົວໜ້າຂະແໜງກວດກາ ຂອງພະແນກແຜນການ ແລະ ການລົງທຶນ, ຮອງຫົວໜ້າພະແນກການຂັ້ນແຂວງທີ່ຄຸ້ມຄອງເຕັກນິກກ່ຽວຂ້ອງ ເປັນຄະນະ ແລະ ປະກອບມີກອງເລຂາປະຈໍາການ.

9.9.2 ການອອກໃບຢັ້ງຢືນຜົນການປະເມີນ ມີດັ່ງນີ້:

ພາຍຫຼັງທີ່ໂຄງການລົງທຶນຂອງລັດ ຖືກຮັບຮອງຜົນການປະເມີນຈາກຄະນະຮັບຮອງຜົນການປະເມີນແຕ່ລະຂັ້ນແລ້ວ ກອງເລຂາຂອງຄະນະຮັບຮອງຜົນການປະເມີນຕາມຂັ້ນຄຸ້ມຄອງຕ້ອງໄດ້ນໍາສະເໜີຕໍ່ຜູ້ມີສິດອະນຸມັດອອກໃບຢັ້ງຢືນ ເຊິ່ງຜູ້ມີສິດອອກໃບຢັ້ງຢືນຜົນການປະເມີນ ມີດັ່ງນີ້:

- ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອອກໃບຢັ້ງຢືນຜົນການປະເມີນສໍາລັບທຸກປະເພດໂຄງການຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ.

- ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ເປັນຜູ້ອອກໃບຢັ້ງຢືນຜົນການປະເມີນສໍາລັບໂຄງການປະເພດ V ຂອງແຂວງຕົນ.

9.9.3 ການນໍາໃຊ້ຜົນຂອງການປະເມີນ ມີດັ່ງນີ້:

- ຜົນການປະເມີນໂຄງການກ່ອນສະເໜີເຂົ້າແຜນການລົງທຶນຂອງລັດ ແມ່ນນໍາໃຊ້ເປັນເອກະສານຢັ້ງຢືນຜົນການປະເມີນ ເພື່ອເປັນເອກະສານປະກອບການພິຈາລະນາເອົາໂຄງການເຂົ້າແຜນການລົງທຶນຂອງລັດປະຈໍາປີ.

- ຜົນການປະເມີນໂຄງການກໍາລັງຈັດຕັ້ງປະຕິບັດ (ໂຄງການສືບຕໍ່) ນໍາໃຊ້ເປັນເອກະສານ ຢັ້ງຢືນຜົນການປະເມີນໃຫ້ເຈົ້າຂອງໂຄງການ ແລະ ຂະແໜງແຜນການ ແລະ ການລົງທຶນ ເປັນບ່ອນອີງໃນການພິຈາລະນາສືບຕໍ່, ໂຈະ ຫຼື ຍົກເລີກໂຄງການ.

- ຜົນການປະເມີນຜົນໂຄງການສໍາເລັດ 100% ກ່ອນການມອບ-ຮັບໂຄງການ ນໍາໃຊ້ເປັນເອກະສານຢັ້ງຢືນຜົນການຈັດຕັ້ງປະຕິບັດໂຄງການ ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເພື່ອມອບ-ຮັບໂຄງການ ພ້ອມທັງສ້າງແຜນການນໍາໃຊ້ ແລະ ບູລະນະຮັກສາໂຄງການໃນແຕ່ລະໄລຍະ.

- ຜົນການປະເມີນໂຄງການຫຼັງນໍາໃຊ້ 2-5 ປີ ນໍາໃຊ້ເປັນບ່ອນອີງໃນການຖອດຖອນບົດ ຮຽນໃນການສ້າງ ແລະ ຄຸ້ມຄອງນໍາໃຊ້ໂຄງການ ເພື່ອເປັນຂໍ້ມູນໃນການອະນຸມັດ

ໂຄງການໃນຕໍ່ໜ້າທີ່ມີລັກສະນະຄ້າຍຄືກັນ ເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມສອດຄ່ອງຂອງໂຄງການ.

9.9.4 ອາຍຸການນຳໃຊ້ໃບຢັ້ງຢືນຜົນການປະເມີນໃນແຕ່ລະໄລຍະ ມີດັ່ງນີ້:

1). ອາຍຸການນຳໃຊ້ໃບຢັ້ງຢືນຜົນການປະເມີນກ່ອນເຂົ້າແຜນ (ໂຄງການສະເໜີໃໝ່) ມີດັ່ງນີ້:

- ໂຄງການກໍ່ສ້າງ ແລະ ໂຄງການສ້ອມແປງພື້ນຖານໂຄງລ່າງ ມີອາຍຸການນຳໃຊ້ 3 ປີ ແລະ ສາມາດຕໍ່ອາຍຸໃບຢັ້ງຢືນຜົນການປະເມີນໄດ້ 1 ຄັ້ງ ແລະ ອາຍຸບໍ່ເກີນ 1 ປີ (ໃນກໍລະນີໂຄງການຫາກມີການປ່ຽນແປງທາງດ້ານເຕັກນິກ, ມູນຄ່າໂຄງການຕ້ອງໄດ້ດຳເນີນການປະເມີນຄືນໃໝ່); ສຳລັບໂຄງການສົ່ງເສີມວິຊາການທີ່ຕິດພັນກັບໂຄງການກໍ່ສ້າງ ແລະ ສ້ອມແປງແມ່ນມີອາຍຸການນຳໃຊ້ ແລະ ສາມາດຕໍ່ໄດ້ຕາມໄລຍະຂອງໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ.

- ໂຄງການສົ່ງເສີມວິຊາການທີ່ບໍ່ຕິດພັນກັບການກໍ່ສ້າງ ມີອາຍຸການນຳໃຊ້ 2 ປີ ແລະ ສາມາດຕໍ່ອາຍຸໃບຢັ້ງຢືນຜົນການປະເມີນໄດ້ 1 ຄັ້ງ ແລະ ອາຍຸບໍ່ເກີນ 1 ປີ (ໃນກໍລະນີມູນຄ່າໂຄງການຫາກມີການປ່ຽນແປງຕ້ອງໄດ້ດຳເນີນການປະເມີນຄືນໃໝ່).

ສຳລັບການສະເໜີຕໍ່ອາຍຸໃບຢັ້ງຢືນຜົນການປະເມີນໂຄງການສະເໜີໃໝ່ ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ສະເໜີເຖິງອົງການຮັບຜິດຊອບປະເມີນໂຄງການລົງທຶນຂອງລັດຕາມການແບ່ງຂັ້ນປະເມີນ; ສຳລັບການປະກອບເອກະສານ ມີດັ່ງນີ້:

- ໜັງສືສະເໜີຕໍ່ອາຍຸໃບຢັ້ງຢືນຜົນການປະເມີນ ຂອງອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ;
- ໃບຢັ້ງຢືນຜົນການປະເມີນສະບັບຕົ້ນ;
- ໃບປະເມີນລາຄາທີ່ໄດ້ຜ່ານການເຊັນຢັ້ງຢືນມູນຄ່າໂຄງການຄືນໃໝ່ຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງຕາມການແບ່ງຂັ້ນຄຸ້ມຄອງ (ສຳລັບໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ);
- ໃບປະເມີນລາຄາ ທີ່ຜ່ານການຢັ້ງຢືນຄືນໃໝ່ຈາກອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ (ສຳລັບໂຄງການສະໜອງວັດຖຸປະກອນ ແລະ ໂຄງການສົ່ງເສີມວິຊາການ).

2). ອາຍຸການນຳໃຊ້ໃບຢັ້ງຢືນຜົນການປະເມີນໂຄງການໃນໄລຍະຈັດຕັ້ງປະຕິບັດ (ໂຄງການສືບຕໍ່), ໂຄງການສຳເລັດ 100% (ກ່ອນການມອບ-ຮັບ) ແລະ ໂຄງການທີ່ນຳໃຊ້ແລ້ວແຕ່ 2-5 ປີ ບໍ່ກຳນົດອາຍຸການນຳໃຊ້ໃບຢັ້ງຢືນຜົນການປະເມີນ.

## 10 . ມາດຕາ 44 ກະຊວງ, ອົງການລັດທຽບເທົ່າກະຊວງ

ວັກ 2 ໃນກໍລະນີກະຊວງ, ອົງການລັດທຽບເທົ່າກະຊວງ ມອບໂຄງການໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດ ຕ້ອງມອບແຕ່ຫົວທີໂດຍເລີ່ມແຕ່ຂັ້ນຕອນການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ, ຈັດຕັ້ງການປະມູນ, ສ້າງສັນຍາ ແລະ ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕາມທີ່ໄດ້ກຳນົດໃນມາດຕາ 46 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ; ສຳລັບທ້ອງຖິ່ນທີ່ໄດ້ຮັບໂຄງການ

ຕ້ອງໄດ້ລາຍງານຜົນການຈັດຕັ້ງປະຕິບັດຂອງແຕ່ລະຂັ້ນຕອນໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງທີ່ມອບໂຄງການໃຫ້ນັ້ນຊາບເປັນແຕ່ລະໄລຍະ; ສ່ວນກະຊວງ, ອົງການລັດທຽບເທົ່າກະຊວງ ໃນນາມເຈົ້າຂອງໂຄງການຕ້ອງໄດ້ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດໃນແຕ່ລະຂັ້ນຕອນໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກຳນົດໄວ້.

ສຳລັບໂຄງການລົງທຶນຂອງລັດຂອງກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ຕົນເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມມາດຕາ 46 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ໃຫ້ປະສານງານກັບທ້ອງຖິ່ນທີ່ໂຄງການຕັ້ງຢູ່ ເພື່ອແຕ່ງຕັ້ງຄະນະປະສານງານຂອງທ້ອງຖິ່ນເພື່ອອຳນວຍຄວາມສະດວກ ແລະ ຮ່ວມຕິດຕາມການຈັດຕັ້ງປະຕິບັດໂຄງການ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ຕ້ອງໄດ້ປະສານສົມທົບກັນແຕ່ຫົວທີ ເພື່ອປະຕິບັດການແບ່ງຂັ້ນຄຸ້ມຄອງໃຫ້ຈະແຈ້ງ ຮັບປະກັນບໍ່ໃຫ້ຂຶ້ນໂຄງການຊໍ້າຊ້ອນກັນເພາະໂຄງການໜຶ່ງບໍ່ສາມາດຂຶ້ນແຜນຢູ່ຫຼາຍບ່ອນໄດ້.

## 11 . ມາດຕາ 45 ອົງການປົກຄອງທ້ອງຖິ່ນ

ວັກ 2 ອົງການປົກຄອງຂັ້ນເມືອງຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ມີມູນຄ່າແຕ່ 5.000.000.000 (ຫ້າຕື້) ກີບລົງມາ: ໝາຍເຖິງ ໂຄງການທີ່ອົງການປົກຄອງເມືອງເປັນຜູ້ສະເໜີໂຄງການລົງທຶນຂອງລັດ ທີ່ສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ ເພື່ອບັນຈຸເຂົ້າແຜນການລົງທຶນຂອງແຂວງ, ນະຄອນຫຼວງ. ໂຄງການທີ່ເມືອງສາມາດນຳສະເໜີ ແລະ ຄຸ້ມຄອງຈັດຕັ້ງປະຕິບັດ ແມ່ນໂຄງການຮັບໃຊ້ທາງດ້ານວິຊາການ ແລະ ພື້ນຖານໂຄງລ່າງ ທີ່ເມືອງສາມາດຄຸ້ມຄອງໄດ້ (ຕາມການແບ່ງຂັ້ນຄຸ້ມຄອງຂອງຂະແໜງວິຊາການ).

ສຳລັບເມືອງທີ່ມີເງື່ອນໄຂສາມາດຈັດຕັ້ງປະຕິບັດໂຄງການທີ່ມີມູນຄ່າຫຼາຍກວ່າ 5.000.000.000 (ຫ້າຕື້) ກີບ ແຕ່ບໍ່ເກີນ 20.000.000.000 (ຊາວຕື້) ກີບ ຕາມການຕົກລົງເຫັນດີຂອງອົງການປົກຄອງແຂວງ ແລະ ນະຄອນຫຼວງ ທີ່ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ: ໝາຍເຖິງ ເມືອງທີ່ມີບຸກຄະລະກອນທີ່ມີຄວາມສາມາດດ້ານການຄຸ້ມຄອງ ແລະ ດ້ານເຕັກນິກ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃຫ້ຖືກຕາມມາດຖານເຕັກນິກ, ກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

## 12 . ມາດຕາ 46 ຂັ້ນຕອນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ

ຂັ້ນຕອນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ພາຍຫຼັງທີ່ແຜນການລົງທຶນຂອງລັດປະຈຳປີ ໄດ້ຖືກຮັບຮອງຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໃນມາດຕາ 38 ແລະ ມາດຕາ 39 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດແລ້ວ ກະຊວງແຜນການ ແລະ ການລົງທຶນ ຕ້ອງໄດ້ແຈ້ງແຜນການລົງທຶນຂອງລັດປະຈຳປີໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ເຊິ່ງປະກອບດ້ວຍ 4 ຂັ້ນຕອນ ຄື: ❶ແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ, ❷ຈັດຕັ້ງການປະມູນໂຄງການລົງທຶນຂອງລັດ, ❸ສ້າງສັນຍາໂຄງການລົງທຶນຂອງລັດ ແລະ ❹ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ. ການຈັດຕັ້ງປະຕິບັດແຕ່ລະຂັ້ນຕອນ ມີດັ່ງນີ້:

12.1 ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ຕາມທີ່ໄດ້ກໍານົດໃນມາດຕາ 41 ແລະ ມາດຕາ 47 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ມີດັ່ງນີ້:

- ໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປົກກະຕິປະເພດ I ແຕ່ງຕັ້ງໂດຍລັດຖະບານ ເຊິ່ງປະກອບດ້ວຍຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.
- ໂຄງການລົງທຶນຂອງລັດປົກກະຕິປະເພດ II, III, IV ແລະ V ແຕ່ງຕັ້ງໂດຍເຈົ້າຂອງໂຄງການ ເຊິ່ງຄະນະຮັບຜິດຊອບໂຄງການປະກອບດ້ວຍພາກສ່ວນກ່ຽວຂ້ອງຂອງເຈົ້າຂອງໂຄງການ, ຜູ້ຕາງໜ້າຈາກຂະແໜງການເງິນ, ຜູ້ຕາງໜ້າຈາກຂະແໜງແຜນການ ແລະ ການລົງທຶນ, ຜູ້ຕາງໜ້າຈາກຂະແໜງການຄຸ້ມຄອງເຕັກນິກ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ.

ຄະນະຮັບຜິດຊອບໂຄງການມີສິດ ແລະ ໜ້າທີ່ຕາມທີ່ໄດ້ກໍານົດໃນມາດຕາ 60 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

12.2 ການຈັດຕັ້ງປະມູນໂຄງການລົງທຶນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 48 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ມີດັ່ງນີ້:

ພາຍຫຼັງລັດຖະບານ ຫຼື ເຈົ້າຂອງໂຄງການໄດ້ແຕ່ງຕັ້ງຄະນະຮັບຜິດຊອບໂຄງການແລ້ວ, ຄະນະຮັບຜິດຊອບໂຄງການຕ້ອງຈັດກອງປະຊຸມປຶກສາຫາລືກ່ຽວກັບວິທີ, ຮູບແບບ ແລະ ເງື່ອນໄຂໃນການປະມູນໂຄງການ ແລະ ນໍາສະເໜີຕໍ່ເຈົ້າຂອງໂຄງການພິຈາລະນາຕົກລົງ ແລ້ວຄະນະຮັບຜິດຊອບໂຄງການຈຶ່ງດໍາເນີນການປະມູນຢ່າງເປີດເຜີຍ, ໂປ່ງໃສ ແລະ ຍຸຕິທໍາ ຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 (ໃນກໍລະນີມີການປັບປຸງກົດໝາຍ ຫຼື ຄໍາແນະນໍາດັ່ງກ່າວ ໃຫ້ຖືເອົາສະບັບປັບປຸງໃໝ່ນັ້ນປ່ຽນແທນ) ແລ້ວລາຍງານຜົນການປະມູນຕໍ່ເຈົ້າຂອງໂຄງການ ເພື່ອພິຈາລະນາຮັບຮອງເອົາຜູ້ຊະນະການປະມູນໂຄງການ ແລ້ວຈຶ່ງດໍາເນີນການສ້າງສັນຍາໂຄງການ, ແຕ່ລາຄາຂອງຜູ້ທີ່ຈະຊະນະການປະມູນຕ້ອງມີລາຄາບໍ່ເກີນມູນຄ່າທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຮັບຮອງ.

ໃນກໍລະນີທີ່ລາຄາຂອງບໍລິສັດຊະນະການປະມູນ ຕໍ່າກວ່າມູນຄ່າທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຮັບຮອງ ແມ່ນບໍ່ອະນຸຍາດໃຫ້ນໍາເອົາມູນຄ່າທີ່ເຫຼືອໄປຈັດຕັ້ງປະຕິບັດໜ້າວຽກອື່ນ; ໂດຍໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ທ້ອງຖິ່ນຕ່າງໆທີ່ເປັນເຈົ້າຂອງໂຄງການຕ້ອງໄດ້ລາຍງານເຖິງຂະແໜງແຜນການ ແລະ ການລົງທຶນ ເພື່ອສັງລວມລາຍງານຕໍ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ເພື່ອປ່ຽນແປງມູນຄ່າໂຄງການມາເປັນມູນຄ່າດຽວກັບມູນຄ່າສັນຍາ ໃນຕາຕະລາງແຜນການລົງທຶນຂອງລັດ.

12.3 ການສ້າງສັນຍາໂຄງການລົງທຶນຂອງລັດ ຕາມທີ່ກໍານົດໃນ ມາດຕາ 49 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ມີດັ່ງນີ້:

12.3.1 ຂະບວນການສ້າງສັນຍາໂຄງການສະເໜີໃໝ່ ມີດັ່ງນີ້:

ພາຍຫຼັງທີ່ເຈົ້າຂອງໂຄງການໄດ້ຮັບຮອງເອົາຜູ້ຊະນະການປະມູນທາງການແລ້ວ, ຄະນະ

ຮັບຜິດຊອບໂຄງການ ຕ້ອງໄດ້ດຳເນີນການຮ່າງສັນຍາກັບຜູ້ຊະນະການປະມູນ; ສຳລັບການຮ່າງສັນຍາກໍ່ສ້າງ, ສ້ອມແປງ ຫຼື ສະໜອງວັດຖຸປະກອນ ບໍລິສັດທີ່ປຶກສາຕ້ອງສະໜອງຂໍ້ມູນ ແລະ ໃຫ້ຄຳປຶກສາແກ່ຄະນະຮັບຜິດຊອບໂຄງການ. ການດຳເນີນການໃຫ້ປະຕິບັດ ດັ່ງນີ້:

- ຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ: ຄະນະຮັບຜິດຊອບໂຄງການຮ່ວມກັນສ້າງສັນຍາກັບຜູ້ຊະນະການປະມູນ ແລ້ວນຳສະເໜີຕໍ່ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເພື່ອນຳສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ ຢັ້ງຢືນຄວາມສອດຄ່ອງ ແລ້ວສົ່ງກັບຄືນໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການເຊັນສັນຍາກັບຜູ້ຮັບເໝົາໂຄງການ, ຫຼັງຈາກນັ້ນໃຫ້ເອົາສັນຍາດັ່ງກ່າວມາເຊັນຢັ້ງຢືນຈາກກະຊວງແຜນການ ແລະ ການລົງທຶນ (ກົມແຜນການ) ແລ້ວຈຶ່ງດຳເນີນຕາມຂັ້ນຕອນຕໍ່ໄປ.

- ຂັ້ນແຂວງ ແລະ ນະຄອນຫຼວງ: ຄະນະຮັບຜິດຊອບໂຄງການຮ່ວມກັນສ້າງສັນຍາກັບຜູ້ຊະນະການປະມູນ ແລ້ວນຳສະເໜີຕໍ່ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເພື່ອນຳສະເໜີຕໍ່ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ຢັ້ງຢືນຄວາມສອດຄ່ອງ ແລ້ວສົ່ງກັບຄືນໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການເຊັນສັນຍາກັບຜູ້ຮັບເໝົາໂຄງການ, ຫຼັງຈາກນັ້ນ ໃຫ້ເອົາສັນຍາດັ່ງກ່າວມາເຊັນຢັ້ງຢືນຈາກພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ແລ້ວຈຶ່ງດຳເນີນຕາມຂັ້ນຕອນຕໍ່ໄປ.

- ຂັ້ນເມືອງ: ຄະນະຮັບຜິດຊອບໂຄງການຮ່ວມກັນສ້າງສັນຍາກັບຜູ້ຊະນະການປະມູນ ແລ້ວ ນຳສະເໜີຕໍ່ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເພື່ອນຳສະເໜີຕໍ່ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ຢັ້ງຢືນຄວາມສອດຄ່ອງ ແລ້ວສົ່ງກັບຄືນໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການເຊັນສັນຍາກັບຜູ້ຮັບເໝົາໂຄງການ, ຫຼັງຈາກນັ້ນ ໃຫ້ເອົາສັນຍາດັ່ງກ່າວມາເຊັນຢັ້ງຢືນຈາກພະແນກແຜນການ ແລະ ການລົງທຶນແຂວງ ນະຄອນຫຼວງ (ໂດຍຜ່ານການຢັ້ງຢືນຈາກຫ້ອງການແຜນການ ແລະ ການລົງທຶນເມືອງ) ແລ້ວຈຶ່ງດຳເນີນຕາມຂັ້ນຕອນຕໍ່ໄປ.

12.3.2 ການຕໍ່ສັນຍາໂຄງການ ມີດັ່ງນີ້:

ໂຄງການລົງທຶນຂອງລັດ ສາມາດຕໍ່ໄລຍະເວລາການປະຕິບັດວຽກໃນສັນຍາໄດ້; ສຳລັບໄລຍະຂອງການຕໍ່ສັນຍາ ແມ່ນຂຶ້ນກັບສາຍເຫດທີ່ພາໃຫ້ໂຄງການດັ່ງກ່າວເກີດຄວາມຊັກຊ້າ. ການຕໍ່ໄລຍະເວລາປະຕິບັດວຽກໃນສັນຍາ ຈະພິຈາລະນາໄປພ້ອມກັບການຕໍ່ໄລຍະຊຳລະໃນແຜນການລົງທຶນຂອງລັດ ໂດຍທີ່ເຈົ້າຂອງໂຄງການເປັນຜູ້ສະເໜີເຖິງກະຊວງແຜນການ ແລະ ການລົງທຶນ. ເງື່ອນໄຂ ແລະ ຂັ້ນຕອນຂອງການຕໍ່ສັນຍາ ມີດັ່ງນີ້:

1) ເງື່ອນໄຂຂອງໂຄງການທີ່ສາມາດຕໍ່ສັນຍາໄດ້ຕ້ອງເກີດຈາກສາຍເຫດໃດໜຶ່ງ ດັ່ງນີ້: 1). ມີການດັດແກ້ມູນຄ່າໂຄງການຈາກຜູ້ມີສິດອຳນາດ ຕາມຂໍ້ 2.4.5 ຂອງຄຳແນະນຳສະບັບນີ້; 2). ເຫດສຸກເສີນທີ່ເກີດຈາກໄພພິບັດທາງທຳມະຊາດອັນເຮັດໃຫ້ໂຄງການບໍ່ສາມາດປະຕິບັດໄດ້; 3). ໂຄງການຖືກສັ່ງໂຈະຊົ່ວຄາວ ແລະ 4). ເຈົ້າຂອງໂຄງການບໍ່ສາມາດປະຕິບັດພັນທະຂໍ້ຜູກພັນທາງສັນຍາທີ່ພາໃຫ້ການປະຕິບັດໂຄງການຊັກຊ້າ.
2) ຂັ້ນຕອນສະເໜີ ແລະ ພິຈາລະນາ ການຕໍ່ສັນຍາໂຄງການ:

- ໂຄງການຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ: ບໍລິສັດຮັບເໝົານໍາສະເໜີບັນຫາຕໍ່ຄະນະຮັບຜິດຊອບໂຄງການ ເພື່ອຄົ້ນຄ້ວານໍາສະເໜີຕໍ່ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ນໍາສະເໜີຕໍ່ເຈົ້າຂອງໂຄງການນໍາສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າພິຈາລະນາຕົກລົງການຕໍ່ສັນຍາ.

- ໂຄງການປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ: ບໍລິສັດຮັບເໝົານໍາສະເໜີບັນຫາຕໍ່ຄະນະຮັບຜິດຊອບໂຄງການ ເພື່ອຄົ້ນຄວ້ານໍາສະເໜີຕໍ່ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການນໍາສະເໜີຕໍ່ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ເພື່ອຄົ້ນຄວ້າລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງນໍາສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າພິຈາລະນາຕົກລົງການຕໍ່ສັນຍາ.

ສໍາລັບໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ບໍລິສັດຮັບເໝົານໍາສະເໜີບັນຫາຕໍ່ຄະນະຮັບຜິດຊອບໂຄງການ ເພື່ອຄົ້ນຄ້ວານໍາສະເໜີຕໍ່ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການນໍາສະເໜີຕໍ່ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ເພື່ອຄົ້ນຄວ້າລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຕົກລົງການຕໍ່ສັນຍາ.

ໃນກໍລະນີໂຄງການໝົດໄລຍະຊໍາລະຕາມທີ່ກໍານົດໄວ້ໃນແຜນການລົງທຶນຂອງລັດທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຮັບຮອງ ແລະ ການປະຕິບັດບໍລິມາດວຽກສໍາເລັດຕາມສັນຍາໂຄງການດັ່ງກ່າວຈະໄດ້ຖືກສັງລວມເຂົ້າໃນບັນຊີໂຄງການໜີ້ສິນ ແລະ ຈະສືບຕໍ່ຂຶ້ນແຜນຊໍາລະ, ແຕ່ໃນກໍລະນີ ໂຄງການໝົດໄລຍະຊໍາລະຕາມແຜນສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຮັບຮອງ ແຕ່ການປະຕິບັດບໍລິມາດວຽກບໍ່ສໍາເລັດຕາມສັນຍາໂຄງການດັ່ງກ່າວຖືກພິຈາລະນາງົດການຂຶ້ນແຜນຊໍາລະໃນປີຕໍ່ໄປ.

12.3.3 ການຍົກເລີກສັນຍາ ມີດັ່ງນີ້:

ການຍົກເລີກສັນຍາ ຕ້ອງມີສາເຫດໃດໜຶ່ງທີ່ເກີດຂຶ້ນ ແລະ ໄດ້ຮັບການຕົກລົງຈາກອົງການທີ່ມີສິດຍົກເລີກໂຄງການຕາມທີ່ໄດ້ກໍານົດໃນມາດຕາ 59, 60, 76 ແລະ ມາດຕາ 80 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

ພາຍຫຼັງທີ່ໄດ້ຮັບການຍົກເລີກສັນຍາໂຄງການແລ້ວ ແຕ່ຍັງມີຄວາມຈໍາເປັນໃນການສືບຕໍ່ຈັດຕັ້ງປະຕິບັດໂຄງການໃຫ້ສໍາເລັດ ໃຫ້ປະຕິບັດຂັ້ນຕອນຕ່າງໆ ຄືກັນກັບການເລີ່ມຈັດຕັ້ງປະຕິບັດໂຄງການໃໝ່ ໂດຍເລີ່ມຈາກເຈົ້າຂອງໂຄງການ ອອກຂໍ້ຕົກລົງໃຫ້ຈັດຕັ້ງການປະມູນຄັດເລືອກເອົາຜູ້ຮັບເໝົາໃໝ່.

## 13 . ມາດຕາ 50 ການຄໍ້າປະກັນສັນຍາຮັບເໝົາ ແລະ ການຄໍ້າປະກັນໂຄງການລົງທຶນຂອງລັດ

13.1ການຄໍ້າປະກັນສັນຍາຮັບເໝົາ ມີດັ່ງນີ້:

- ຜູ້ຮັບເໝົາ, ຜູ້ສະໜອງ, ຜູ້ບໍລິການ ຕ້ອງວາງເງິນຄໍ້າປະກັນສັນຍາ ເປັນເງິນສົດ ຫຼື ໜັງສືຄໍ້າປະກັນຂອງທະນາຄານ (Bank Guarantee) ໃຫ້ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ກ່ອນຈະເຊັນສັນຍາ. ກໍລະນີຄໍ້າປະກັນເປັນເງິນສົດໃຫ້ເກັບຮັກສາໄວ້ຢູ່ຄັງເງິນແຫ່ງຊາດ.

- ໄລຍະເວລາການຄໍ້າປະກັນສັນຍາ ແມ່ນເລີ່ມແຕ່ມື້ເຊັນສັນຍາຮັບເໝົາໂຄງການຈົນກວ່າການປະຕິບັດໂຄງການຈະໄດ້ຮັບການກວດກາໜ້າວຽກໃນປີທີ 1 ຕາມຂໍ້ 2.6.2 ຂອງຄໍາແນະນໍາສະບັບນີ້ ແລະ ຜູ້ຮັບເໝົາ, ຜູ້ສະໜອງ ແລະ ຜູ້ບໍລິການ ບໍ່ໄດ້ລະເມີດສັນຍາເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ຈຶ່ງສົ່ງເງິນຄໍ້າປະກັນຄືນໃຫ້ຜູ້ຮັບເໝົາ, ຜູ້ສະໜອງ ແລະ ຜູ້ບໍລິການ ທັງໝົດ. ໃນກໍລະນີຜູ້ຮັບເໝົາບໍ່ສາມາດປະຕິບັດໄດ້ຕາມສັນຍາ ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການມີສິດຍຶດເອົາເງິນຄໍ້າປະກັນດັ່ງກ່າວ.

13.2 ການຄໍ້າປະກັນໂຄງການ ມີດັ່ງນີ້:

- ພາຍຫຼັງໂຄງການຈັດຕັ້ງປະຕິບັດສໍາເລັດ 100% ແລະ ໄດ້ມອບ-ຮັບໂຄງການເພື່ອນໍາໃຊ້ຊົ່ວຄາວຜູ້ຮັບເໝົາ, ຜູ້ສະໜອງ, ຜູ້ບໍລິການຕ້ອງວາງເງິນຄໍ້າປະກັນໂຄງການ ໃຫ້ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເຊິ່ງເງິນຄໍ້າປະກັນດັ່ງກ່າວສາມາດນໍາໃຊ້ ຄື: (1). ເປັນເງິນສົດ, (2). ໜັງສືຄໍ້າປະກັນຂອງທະນາຄານ (Bank Guarantee) ແລະ (3). ນໍາໃຊ້ແຜນລົງທຶນປະຈໍາປີຂອງໂຄງການດັ່ງກ່າວ (ໃຊ້ໄດ້ໃນກໍລະນີມູນຄ່າຄໍ້າປະກັນບໍ່ເກີນມູນຄ່າແຜນປີ ເຊິ່ງໄລຍະຄໍ້າປະກັນແມ່ນນອນໃນປີງົບປະມານດັ່ງກ່າວ ແລະ ມູນຄ່າແຜນປີຍັງບໍ່ໄດ້ຮັບການເບີກຖອນ) ໂດຍເຈົ້າຂອງໂຄງການສາມາດນໍາໃຊ້ງົບປະມານປະຈໍາປີຂອງໂຄງການດັ່ງກ່າວໄດ້ໃນການສ້ອມແປງຄືນໃນກໍລະນີບໍລິສັດຮັບເໝົາກໍ່ສ້າງບໍ່ປະຕິບັດພັນການຄໍ້າປະກັນ; ກໍລະນີຄໍ້າປະກັນເປັນເງິນສົດກໍໃຫ້ເກັບຮັກສາໄວ້ຢູ່ຄັງເງິນແຫ່ງຊາດເຊັ່ນກັນ.
- ໄລຍະເວລາການຄໍ້າປະກັນໂຄງການແມ່ນ 12 ເດືອນ ເລີ່ມແຕ່ມື້ມອບ-ຮັບໂຄງການຊົ່ວຄາວເປັນຕົ້ນໄປ. ພາຍຫຼັງໝົດອາຍຸຄໍ້າປະກັນແລ້ວຫາກກິດຈະການທີ່ຄໍ້າປະກັນນັ້ນບໍ່ມີບັນຫາ ໂດຍການຢັ້ງຢືນຂອງຄະນະຮັບຜິດຊອບໂຄງການ, ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ຈຶ່ງສົ່ງເງິນຄໍ້າປະກັນຄືນໃຫ້ຜູ້ຮັບເໝົາ, ຜູ້ສະໜອງ ແລະ ຜູ້ບໍລິການ. ໃນໄລຍະຄໍ້າປະກັນຖ້າຜູ້ຮັບເໝົາຫາກລະເມີດສັນຍາ ຫຼື ສິ່ງກໍ່ສ້າງຫາກມີການເປ່ເພເສຍຫາຍທີ່ເກີດຈາກຄວາມບົກພ່ອງຂອງຜູ້ຮັບເໝົາເອງ, ຜູ້ຮັບເໝົາຕ້ອງໄດ້ແປງຄືນໃຫ້ຮັບປະກັນຄຸນນະພາບ, ຫາກຜູ້ຮັບເໝົາບໍ່ຍິນຍອມ ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການມີສິດນໍາໃຊ້ເງິນຄໍ້າປະກັນ ເພື່ອສ້ອມແປງຄືນ.

ສໍາລັບອັດຕາຄໍ້າປະກັນສັນຍາ ແລະ ຄໍ້າປະກັນໂຄງການ: ແມ່ນອັດຕາ 10% (ສິບສ່ວນຮ້ອຍ) ຂອງມູນຄ່າສັນຍາໂຄງການ. ເງິນຄໍ້າປະກັນສັນຍາ ແລະ ຄໍ້າປະກັນໂຄງການຈະບໍ່ໄດ້ຄິດໄລ່ດອກເບ້ຍ.

ທຸກໂຄງການລົງທຶນຂອງລັດ ທີ່ນໍາໃຊ້ງົບປະມານພາຍໃນເພື່ອຊໍາລະໃຫ້ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ເຊັນສັນຍາກັບຜູ້ຮັບເໝົາໂຄງການຕ້ອງເປັນສະກຸນເງິນກີບ.

**14 . ມາດຕາ 54 ການດັດແກ້ມູນຄ່າໂຄງການລົງທຶນຂອງລັດ**

ໃນໄລຍະຈັດຕັ້ງປະຕິບັດໂຄງການຫາກພົບເຫັນສາເຫດໃດໜຶ່ງ ຕາມທີ່ກໍານົດໃນ ຂໍ້ 2 ຂອງມາດຕາ 54 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ທີ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດ

ໂຄງການ ແລະ ມີຄວາມຈຳເປັນຕ້ອງໄດ້ດັດແປງໂຄງສ້າງ, ແບບແຜນຜັງ, ເຕັກນິກ ຫຼື ບໍລິມາດວຽກ ແລະ ລາຄາຫົວໜ່ວຍ ເປັນສາເຫດໃຫ້ມູນຄ່າຂອງໂຄງການ ເພີ່ມຂຶ້ນ ຫຼື ຫຼຸດລົງ ຜູ້ຮັບເໝົາໂຄງການ ຕ້ອງໄດ້ປຶກສາຫາລືກັບທີ່ປຶກສາໂຄງການ ເພື່ອເອກະພາບກັນແລ້ວທີ່ປຶກສາໂຄງການເປັນຜູ້ນຳສະເໜີບັນຫາຕໍ່ຄະນະຮັບຜິດຊອບໂຄງການ ຄົ້ນຄວ້ານຳສະເໜີເຖິງອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການແລ້ວ ນຳສະເໜີເຖິງພະແນກແຜນການ ແລະ ການລົງທຶນປະຈຳແຂວງ/ນະຄອນຫລວງ ຫຼື ຫ້ອງການ/ກົມແຜນການຂອງກະຊວງ-ອົງການລັດທຽບເທົ່າກະຊວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຕໍ່ເຈົ້າຂອງໂຄງການເພື່ອພິຈາລະນາ ນຳສະເໜີຕໍ່ອົງການທີ່ມີສິດດັດແກ້ມູນຄ່າໂຄງການ ຕາມຂໍ້ 14.2 ຂອງຄຳແນະນຳສະບັບນີ້. ສຳລັບດ້ານເຕັກນິກ ແລະ ມູນຄ່າທີ່ສະເໜີດັດແກ້ຕ້ອງໄດ້ຜ່ານການຢັ້ງຢືນທາງການຈາກຂະແໜງການຄຸ້ມຄອງເຕັກນິກ.

14.1 ໂຄງການລົງທຶນຂອງລັດທີ່ສາມາດດັດແກ້ໄດ້

ໂຄງການລົງທຶນຂອງລັດທີ່ສາມາດດັດແກ້ໄດ້ ຕ້ອງມີສາເຫດໃດໜຶ່ງ ດັ່ງນີ້:

- ກໍລະນີການດັດແກ້ທີ່ມີສາເຫດມາຈາກລາຄາວັດສະດຸກໍ່ສ້າງໃນທ້ອງຕະຫຼາດ ເພີ່ມຂຶ້ນ ຫຼື ຫຼຸດລົງ ຫຼາຍກວ່າ 15% ຫຼື ມີການປັບຄ່າແຮງງານຕາມນະໂຍບາຍຂອງລັດຖະບານ. ການຄິດໄລ່ລາຄາວັດສະດຸກໍ່ສ້າງແມ່ນອີງຕາມການຢັ້ງຢືນຂອງຂະແໜງການຄຸ້ມຄອງດ້ານລາຄາສິນຄ້າ ຫຼື ຕາມການປັບຄ່າແຮງງານຂອງລັດຖະບານ.

- ການດັດແກ້ທີ່ມີສາເຫດມາຈາກໄພພິບັດທຳມະຊາດ ຫຼື ເຫດບັງເອີນທີ່ບໍ່ສາມາດຄວບຄຸມໄດ້. ການຄິດໄລມູນຄ່າໃຫ້ຖືເອົາລາຄາຫົວໜ່ວຍຕາມໃບປະເມີນລາຄາທີ່ສອງຝ່າຍໄດ້ເຊັນສັນຍາກັນ.

- ການດັດແກ້ທີ່ມີສາເຫດມາຈາກການປ່ຽນແປງນະໂຍບາຍ, ແຜນແມ່ບົດ ຫຼື ຄວາມຈຳເປັນທີ່ສົ່ງຜົນກະທົບໂດຍກົງຕໍ່ປະສິດທິຜົນຂອງໂຄງການເຊິ່ງອາດກະທົບເຮັດໃຫ້ເກີດມີການປ່ຽນແປງໂຄງສ້າງ, ແຜນຜັງ, ເຕັກນິກ ຫຼື ບໍລິມາດວຽກ. ການຄິດໄລ່ມູນຄ່າໃຫ້ຖືເອົາລາຄາຫົວໜ່ວຍຕາມໃບປະເມີນລາຄາທີ່ສອງຝ່າຍໄດ້ເຊັນສັນຍາກັນ.

- ການດັດແກ້ທີ່ເກີດຈາກສາເຫດໃດໜຶ່ງທາງດ້ານເຕັກນິກ ຫຼື ເພື່ອຮັບປະກັນທາງດ້ານມາດຖານເຕັກນິກ, ຄວາມສາມາດ ແລະ ເປົ້າໝາຍໂຄງການ ເຊິ່ງອາດກະທົບເຮັດໃຫ້ເກີດມີການປ່ຽນແປງໂຄງສ້າງ, ແຜນຜັງເຕັກນິກ ຫຼື ບໍລິມາດວຽກ. ການຄິດໄລ່ມູນຄ່າໃຫ້ຖືເອົາລາຄາຫົວໜ່ວຍຕາມໃບປະເມີນລາຄາທີ່ສອງຝ່າຍໄດ້ເຊັນສັນຍາກັນ.

ການປ່ຽນແປງມູນຄ່າທີ່ເກີດຈາກສາເຫດຂອງການປ່ຽນແປງນະໂຍບາຍ, ແຜນແມ່ບົດ ແລະ ການປ່ຽນແປງເພື່ອຮັບປະກັນມາດຖານເຕັກນິກ ແລະ ເປົ້າໝາຍໂຄງການ ແມ່ນບໍ່ໃຫ້ເກີນ 20% (ຊາວສ່ວນຮ້ອຍ) ຂອງມູນຄ່າສັນຍາ ໃນນີ້: ໃນກໍລະນີມີການປ່ຽນແປງແຜນຜັງກໍ່ສ້າງທີ່ພາໃຫ້ມີບໍລິມາດວຽກເພີ່ມຂຶ້ນ ແລະ ວຽກດັ່ງກ່າວຢູ່ນອກແຜນຜັງເດີມ ແລະ ມູນຄ່າເພີ່ມຂຶ້ນບໍ່ເກີນ 10% (ສິບສ່ວນຮ້ອຍ) ຂອງມູນຄ່າສັນຍາ ການຄິດໄລ່ມູນຄ່າໃຫ້ຖືເອົາລາຄາຫົວໜ່ວຍຕາມໃບປະເມີນລາຄາທີ່ສອງຝ່າຍໄດ້ເຊັນສັນຍາກັນ, ຖ້າເກີນ 10% (ສິບສ່ວນຮ້ອຍ) ຂອງມູນຄ່າສັນຍາແມ່ນໃຫ້ດຳເນີນການປະມູນ ຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017. ໃນກໍລະນີວຽກເພີ່ມດັ່ງກ່າວ ຢູ່ໃນແຜນຜັງເດີມການຄິດໄລ່ມູນຄ່າໃຫ້ຖືເອົາລາຄາຫົວໜ່ວຍຕາມໃບປະເມີນລາຄາທີ່ສອງຝ່າຍໄດ້ເຊັນສັນຍາກັນ.

14.2 ການນຳສະເໜີ ແລະ ອົງການທີ່ມີສິດດັດແກ້ມູນຄ່າໂຄງການລົງທຶນຂອງລັດ

ການນຳສະເໜີ ແລະ ອົງການທີ່ມີສິດດັດແກ້ມູນຄ່າໂຄງການລົງທຶນຂອງລັດ ມີດັ່ງນີ້:

- ໂຄງການຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ທີ່ມີມູນຄ່າຂອງການດັດແກ້ ຫຼາຍກວ່າ 50.000.000.000 (ຫ້າສິບຕື້) ກີບ ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ປະກອບເອກະສານໂຄງການຄົບຊຸດພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການດັດແກ້ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງການດັດແກ້ມູນຄ່າໂຄງການ;

- ໂຄງການຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ທີ່ມີມູນຄ່າຂອງການດັດແກ້ຫຼາຍກວ່າ 10.000.000.000 (ສິບຕື້) ກີບ ຫາ 50.000.000.000 (ຫ້າສິບຕື້) ກີບ ໃຫ້ກະຊວງອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການດັດແກ້ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານພິຈາລະນາຕົກລົງການດັດແກ້ມູນຄ່າໂຄງການ;

- ສຳລັບມູນຄ່າຂອງການດັດແກ້ແຕ່ 10.000.000.000 (ສິບຕື້) ກີບລົງມາ ທີ່ເປັນໂຄງການຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ ທີ່ມູນຄ່າຂອງການດັດແກ້ແຕ່ 10.000.000.000 (ສິບຕື້) ກີບລົງມາ ແລະ ໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ທີ່ມີມູນຄ່າຂອງການດັດແກ້ຫຼາຍກວ່າ 5.000.000.000 (ຫ້າຕື້) ກີບ ຫາ 10.000.000.000 (ສິບຕື້) ກີບ ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ປະກອບເອກະສານໂຄງການຄົບຊຸດພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການດັດແກ້ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າພິຈາລະນາຕົກລົງການດັດແກ້ມູນຄ່າໂຄງການ;

ໃນກໍລະນີຈຳເປັນລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ສາມາດແຕ່ງຕັ້ງຄະນະວິຊາການທີ່ປະກອບດ້ວຍ: ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງການຄຸ້ມຄອງເຕັກນິກ ແລະ ຂະແໜງທີ່ກ່ຽວຂ້ອງ ເພື່ອລົງກວດກາຕົວຈິງພາກສະໜາມ ເພື່ອຢັ້ງຢືນຄວາມສອດຄ່ອງທາງດ້ານຫຼັກການ ກ່ອນການພິຈາລະນາຕົກລົງ ຫຼື ນຳສະເໜີຕໍ່ອົງການທີ່ມີສິດຖັດໄປ;

- ສຳລັບມູນຄ່າຂອງການດັດແກ້ແຕ່ 5.000.000.000 (ຫ້າຕື້) ກີບລົງມາ ຂອງໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ໃຫ້ອົງການຄຸ້ມຄອງປະຕິບັດໂຄງການປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການດັດແກ້ ນຳສະເໜີເຖິງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ຄົ້ນຄວ້າລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງເພື່ອນຳສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ ພິຈາລະນາຮັບຮອງເອົາການດັດແກ້ໂຄງການ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ບໍ່ສາມາດສະເໜີດັດແກ້ໜ້າວຽກທີ່ຈັດຕັ້ງປະຕິບັດ ແລະ ໄດ້ມີການຊຳລະໄປແລ້ວ; ການດັດແກ້ແມ່ນໃຫ້ດັດແກ້ສະເພາະບັນດາໜ້າວຽກທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ. ຫ້າມບໍ່ໃຫ້ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາໂຄງການປະຕິບັດໜ້າວຽກ ຫຼື ມູນຄ່າດັດແກ້ ກ່ອນການຕົກລົງເຫັນດີຈາກອົງການທີ່ມີສິດພິຈາລະນາຮັບຮອງ.

ໃນກໍລະນີມີຄວາມຈໍາເປັນຕ້ອງໄດ້ດັດແປງໂຄງສ້າງ, ແບບແຜນຜັງ ແລະ ເຕັກນິກ ທີ່ບໍ່ສົ່ງຜົນກະທົບຕໍ່ບໍລິມາດວຽກ, ມາດຖານເຕັກນິກ, ມູນຄ່າຂອງໂຄງການ ແລະ ບໍ່ກະທົບຕໍ່ເປົ້າໝາຍການນໍາໃຊ້ຂອງໂຄງການ ທີ່ປຶກສາໂຄງການຕ້ອງໄດ້ນໍາສະເໜີຕໍ່ຄະນະຮັບຜິດຊອບໂຄງການເພື່ອພິຈາລະນານໍາສະເໜີຕໍ່ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການເພື່ອນໍາສະເໜີຂະແໜງການຄຸ້ມຄອງເຕັກນິກຢັ້ງຢືນ ຈາກນັ້ນຈຶ່ງ ນໍາສະເໜີຕໍ່ເຈົ້າຂອງໂຄງການ ເພື່ອພິຈາລະນາຕົກລົງ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້ພ້ອມທັງແຈ້ງໃຫ້ຂະແໜງການແຜນການ ແລະ ການລົງທຶນ ເພື່ອຊາບ.

ໃນກໍລະນີ ຕ້ອງການຕັດໜ້າວຽກທີ່ບໍ່ຈໍາເປັນໃດໜຶ່ງຂອງໂຄງການອອກຈາກສັນຍາຈັດຊື້-ຈັດຈ້າງຕ້ອງຜ່ານການຮັບຮອງ ແລະ ຢັ້ງຢືນຈາກຂະແໜງການຄຸ້ມຄອງເຕັກນິກ ເຊິ່ງຂະແໜງການເຕັກນິກຕ້ອງກວດກາ, ຢັ້ງຢືນທາງດ້ານໂຄງສ້າງ, ເຕັກນິກ ແລະ ເປົ້າໝາຍການນໍາໃຊ້ໂຄງການ ຫຼື ເປົ້າໝາຍການນໍາໃຊ້ຂອງໜ້າວຽກທີ່ສະເໜີຕັດອອກ, ຖ້າສາມາດຢັ້ງຢືນໄດ້ແລ້ວ ກໍລະນີທີ່ການປ່ຽນແປງດັ່ງກ່າວບໍ່ກະທົບຕໍ່ໂຄງສ້າງ ຫຼື ມູນຄ່າຂອງໂຄງການ ເຈົ້າຂອງໂຄງການສາມາດຕົກລົງການປ່ຽນແປງດັ່ງກ່າວໄດ້ ແຕ່ຕ້ອງໄດ້ລາຍງານເປັນລາຍລັກອັກສອນຕໍ່ກະຊວງແຜນການ ແລະ ການລົງທຶນ ແຕ່ຖ້າມີຜົນກະທົບຕໍ່ໂຄງສ້າງ ຫຼື ມູນຄ່າໂຄງການ ເຈົ້າຂອງໂຄງການຕ້ອງໄດ້ສະເໜີເຖິງອົງການທີ່ມີສິດອໍານາດໃນການດັດແກ້ມູນຄ່າຕາມທີ່ໄດ້ກໍານົດໃນມາດຕາ 54 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ພິຈາລະນາອະນຸມັດກ່ອນ ຈຶ່ງສາມາດປະຕິບັດໄດ້.

## 15 . ມາດຕາ 55 ການໂຈະໂຄງການລົງທຶນຂອງລັດ

ໃນໄລຍະຈັດຕັ້ງປະຕິບັດໂຄງການຫາກພົບເຫັນສາເຫດໃດໜຶ່ງ ຕາມທີ່ກໍານົດໃນຂໍ້ 2 ຂອງມາດຕາ 55 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ທີ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດໂຄງການ ຄະນະຮັບຜິດຊອບໂຄງການຄົ້ນຄວ້ານໍາສະເໜີຕໍ່ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການແລ້ວ ນໍາສະເໜີເຖິງພະແນກແຜນການ ແລະ ການລົງທຶນປະຈໍາແຂວງ/ນະຄອນຫລວງ ຫຼື ຫ້ອງການ/ກົມແຜນການຂອງກະຊວງ-ອົງການລັດທຽບເທົ່າກະຊວງ ເພື່ອຄົ້ນຄວ້າ ແລະ ນໍາສະເໜີຕໍ່ເຈົ້າຂອງໂຄງການເພື່ອພິຈາລະນາ ນໍາສະເໜີຕໍ່ອົງການທີ່ມີສິດໂຈະໂຄງການລົງທຶນຂອງລັດ.

ການນໍາສະເໜີ ແລະ ອົງການທີ່ມີສິດໂຈະໂຄງການລົງທຶນຂອງລັດ ມີດັ່ງນີ້:

1) ໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປົກກະຕິປະເພດ I ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການໂຈະໂຄງການ ນໍາສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານເພື່ອນໍາສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງການໂຈະໂຄງການ.

2) ໂຄງການປະເພດ II ແລະ III ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການໂຈະໂຄງການ ນໍາສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານພິຈາລະນາ ຕົກລົງການໂຈະໂຄງການ.

3) ໂຄງການປະເພດ IV ແລະ V ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການປະເພດ IV ຂອງແຂວງ, ນະຄອນຫຼວງ, ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ

ນະຄອນຫຼວງ ທີ່ກ່ຽວຂ້ອງປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການໂຈະໂຄງການ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ພິຈາລະນາຕົກລົງການໂຈະໂຄງການ.

ໃນກໍລະນີຈຳເປັນລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ສາມາດແຕ່ງຕັ້ງຄະນະວິຊາການທີ່ປະກອບດ້ວຍ: ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງການຄຸ້ມຄອງເຕັກນິກ ແລະ ຂະແໜງທີ່ກ່ຽວຂ້ອງ ເພື່ອລົງກວດກາຕົວຈິງພາກສະໜາມ ແລະ ຢັ້ງຢືນຄວາມສອດຄ່ອງທາງດ້ານຫຼັກການກ່ອນການພິຈາລະນາຕົກລົງ ຫຼື ນຳສະເໜີຕໍ່ອົງການທີ່ມີສິດຖັດໄປ;

4) ໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການໂຈະ ນຳສະເໜີເຖິງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ຄົ້ນຄວ້າລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງເພື່ອນຳສະເໜີຕໍ່ສະພາປະຊາຊົນຂັ້ນແຂວງພິຈາລະນາຮັບຮອງການໂຈະໂຄງການ.

ສຳລັບມູນຄ່າທີ່ເຫຼືອຈາກການໂຈະໂຄງການ ແມ່ນບໍ່ສາມາດນຳໄປຈັດຕັ້ງປະຕິບັດໂຄງການອື່ນໄດ້.

**16 . ມາດຕາ 56 ການອວ່າຍທຶນໂຄງການລົງທຶນຂອງລັດ**

ການອວ່າຍທຶນໂຄງການລົງທຶນຂອງລັດ: ໝາຍເຖິງ ການເຄື່ອນຍ້າຍທຶນທີ່ໄດ້ຮັບອະນຸມັດໃນແຜນການລົງທຶນຂອງລັດປະຈຳປີ ຈາກໂຄງການໜຶ່ງໄປໃສ່ໂຄງການອື່ນທີ່ນອນໃນແຜນການລົງທຶນຂອງລັດປະຈຳປີຂອງຕົນ (ບໍ່ສາມາດອວ່າຍທຶນໄປໃສ່ໂຄງການທີ່ບໍ່ນອນໃນແຜນສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຮັບຮອງ). ການອວ່າຍທຶນຕ້ອງມີສາເຫດໃດໜຶ່ງ ຕາມທີ່ກຳນົດໃນຂໍ້ 2 ມາດຕາ 56 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ. ພະແນກແຜນການ ແລະ ການລົງທຶນປະຈຳແຂວງ/ນະຄອນຫລວງ ຫຼື ຫ້ອງການ/ກົມແຜນການຂອງກະຊວງ-ອົງການລັດທຽບເທົ່າກະຊວງ ເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີເຈົ້າຂອງໂຄງການເພື່ອພິຈາລະນາ ນຳສະເໜີຕໍ່ອົງການທີ່ມີສິດອວ່າຍທຶນໂຄງການລົງທຶນຂອງລັດ.

ການນຳສະເໜີ ແລະ ອົງການທີ່ມີສິດອວ່າຍທຶນໂຄງການລົງທຶນຂອງລັດ ດັ່ງນີ້:

1) ມູນຄ່າຂອງການອວ່າຍທຶນຫຼາຍກວ່າ 50.000.000.000 (ຫ້າສິບຕື້) ກີບ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ປະກອບເອກະສານໂຄງການຄົບຊຸດພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການອວ່າຍທຶນ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນຄົ້ນຄວ້າລາຍງານຕໍ່ລັດຖະບານເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາການອວ່າຍທຶນ;

2) ມູນຄ່າຂອງການອວ່າຍທຶນຫຼາຍກວ່າ 10.000.000.000 (ສິບຕື້) ກີບ ຫາ 50.000.000.000 (ຫ້າສິບຕື້) ກີບ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການອວ່າຍທຶນ ນຳສະເໜີເຖິງກະຊວງແຜນ ການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານເພື່ອພິຈາລະນາຕົກລົງການອວ່າຍທຶນໂຄງການ;

3) ມູນຄ່າຂອງການອວ່າຍທຶນແຕ່ 10.000.000.000 (ສິບຕື້) ກີບ ລົງມາ ຂອງໂຄງການປະເພດ I, II, III, IV ແລະ V ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການປະເພດ I, II, III ແລະ IV ຂອງແຂວງ, ນະຄອນຫຼວງ ແລະ ມູນຄ່າຂອງການອວ່າຍທຶນຫຼາຍກວ່າ 5.000.000.000 (ຫ້າຕື້) ກີບ ຫາ 10.000.000.000 (ສິບຕື້) ກີບ ຂອງໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ໃຫ້ເຈົ້າຂອງໂຄງການປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການອວ່າຍທຶນ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າພິຈາລະນາຕົກລົງການອວ່າຍທຶນໂຄງການ.

4) ສຳລັບມູນຄ່າຂອງການອວ່າຍທຶນແຕ່ 5.000.000.000 (ຫ້າຕື້) ກີບ ລົງມາ ທີ່ເປັນໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການອວ່າຍທຶນ ນຳສະເໜີເຖິງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ຄົ້ນຄວ້າລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອນຳສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງການອວ່າຍທຶນໂຄງການ.

ການສະເໜີອວ່າຍທຶນດັ່ງກ່າວ ຊ້າສຸດບໍ່ໃຫ້ກາຍວັນທີ 31 ກໍລະກົດ ຂອງທຸກໆປີ.

**17 . ມາດຕາ 57 ການຍົກເລີກໂຄງການລົງທຶນຂອງລັດ**

ໃນໄລຍະຈັດຕັ້ງປະຕິບັດໂຄງການຫາກພົບເຫັນສາເຫດໃດໜຶ່ງ ຕາມທີ່ກຳນົດໃນຂໍ້ 2 ຂອງມາດຕາ 57 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ທີ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດໂຄງການ ຄະນະຮັບຜິດຊອບໂຄງການເປັນຜູ້ຄົ້ນຄວ້ານຳສະເໜີຕໍ່ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ນຳສະເໜີເຖິງພະແນກແຜນການ ແລະ ການລົງທຶນປະຈຳແຂວງ/ນະຄອນຫລວງ ຫຼື ຫ້ອງການ/ກົມແຜນການຂອງກະຊວງ-ອົງການລັດທຽບເທົ່າກະຊວງ ເປັນຜູ້ຄົ້ນຄວ້າ ແລະ ສະເໜີຕໍ່ເຈົ້າຂອງໂຄງການ ເພື່ອພິຈາລະນາ ນຳສະເໜີຕໍ່ອົງການທີ່ມີສິດຍົກເລີກໂຄງການລົງທຶນຂອງລັດ.

ການນຳສະເໜີ ແລະ ອົງການທີ່ມີສິດຍົກເລີກໂຄງການລົງທຶນຂອງລັດ ມີດັ່ງນີ້:

1) ການຍົກເລີກໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປົກກະຕິປະເພດ I ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ທີ່ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການຍົກເລີກໂຄງການ ແລ້ວນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານເພື່ອນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງການຍົກເລີກໂຄງການ;

2) ການຍົກເລີກໂຄງການປະເພດ II ແລະ III ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ທີ່ກ່ຽວຂ້ອງປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການຍົກເລີກໂຄງການ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າລາຍງານຕໍ່ລັດຖະບານ ເພື່ອພິຈາລະນາຍົກເລີກໂຄງການ;

3) ການຍົກເລີກໂຄງການປະເພດ IV ແລະ V ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ໂຄງການປະເພດ IV ຂອງແຂວງ, ນະຄອນຫຼວງ ໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ,

ແຂວງ ແລະ ນະຄອນຫຼວງ ທີ່ກ່ຽວຂ້ອງປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການຍົກເລີກໂຄງການ ນຳສະເໜີເຖິງກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າພິຈາລະນາຍົກເລີກໂຄງການ;

ໃນກໍລະນີຈຳເປັນລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ສາມາດແຕ່ງຕັ້ງຄະນະວິຊາການທີ່ປະກອບດ້ວຍ: ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງການຄຸ້ມຄອງເຕັກນິກ ແລະ ຂະແໜງທີ່ກ່ຽວຂ້ອງ ເພື່ອລົງກວດກາຕົວຈິງພາກສະໜາມ ແລະ ຢັ້ງຢືນຄວາມສອດຄ່ອງທາງດ້ານຫຼັກການ ກ່ອນການພິຈາລະນາຕົກລົງ ຫຼື ນຳສະເໜີຕໍ່ອົງການທີ່ມີສິດຖັດໄປ;

4) ການຍົກເລີກໂຄງການປະເພດ V ຂອງແຂວງ, ນະຄອນຫຼວງ ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ປະກອບເອກະສານໂຄງການຄົບຊຸດ ພ້ອມທັງເອກະສານທີ່ຕິດພັນກັບສາເຫດຂອງການຍົກເລີກໂຄງການ ນຳສະເໜີເຖິງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ຄົ້ນຄວ້າລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອນຳສະເໜີຕໍ່ສະພາປະຊາຊົນຂັ້ນແຂວງພິຈາລະນາຍົກເລີກໂຄງການ.

**18 . ມາດຕາ 65 ອົງການຮັບຜິດຊອບລາຍງານການປະຕິບັດແຜນການລົງທຶນຂອງລັດ**

ອົງການຮັບຜິດຊອບລາຍງານການປະຕິບັດແຜນການລົງທຶນຂອງລັດ ເຊິ່ງປະກອບດ້ວຍລັດຖະບານ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ; ແຕ່ລະອົງການມີຄວາມຮັບຜິດຊອບ ດັ່ງນີ້:

18.1 ລັດຖະບານ: ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການລົງທຶນຂອງລັດ ຕໍ່ກອງປະຊຸມສະພາແຫ່ງຊາດ;

18.2 ກະຊວງແຜນການ ແລະ ການລົງທຶນ: ສະຫຼຸບ, ສັງລວມ, ຕີລາຄາ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດຕໍ່ລັດຖະບານຢ່າງເປັນປົກກະຕິ;

18.3 ກະຊວງການເງິນ: ສະຫຼຸບ, ສັງລວມ ແລະ ຕີລາຄາ ສະພາບການຈັດຕັ້ງປະຕິບັດແຜນການນຳໃຊ້ງົບປະມານເຂົ້າໃນແຜນການລົງທຶນຂອງລັດ ເປັນແຕ່ລະງວດ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ 20 ຂອງເດືອນທຳອິດຂອງງວດຖັດໄປ, ພ້ອມທັງລາຍງານຕໍ່ລັດຖະບານຢ່າງເປັນປົກກະຕິ;

18.4 ກະຊວງ, ອົງການລັດທຽບເທົ່າກະຊວງ: ສະຫຼຸບ, ສັງລວມ, ຕີລາຄາ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດຂອງຕົນ ເປັນແຕ່ລະງວດ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ກ່ອນວັນທີ 20 ຂອງເດືອນ ທຳອິດຂອງງວດຖັດໄປຢ່າງເປັນປົກກະຕິ;

18.5 ອົງການປົກຄອງທ້ອງຖິ່ນ: ສະຫຼຸບ, ສັງລວມ, ຕີລາຄາ ແລະ ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດຂອງຕົນຕໍ່ສະພາປະຊາຊົນຂັ້ນແຂວງ ແລະ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນແຕ່ລະງວດກ່ອນວັນທີ 20 ຂອງເດືອນທຳອິດຂອງງວດຖັດໄປຢ່າງເປັນປົກກະຕິ; ພ້ອມທັງ

ລາຍງານຜົນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ກະຊວງ, ອົງການລັດທຽບເທົ່າກະຊວງໄດ້ມອບໝາຍໃຫ້ຕົນຮັບຜິດຊອບຢ່າງເປັນປົກກະຕິ.

**19 . ມາດຕາ 71 ການມອບ-ຮັບໂຄງການ**

ພາຍຫຼັງທີ່ໂຄງການໄດ້ຮັບການຈັດຕັ້ງປະຕິບັດສຳເລັດ 100% ຕາມບໍລິມາດວຽກທີ່ລະບຸໃນສັນຍາ ໂດຍຜ່ານການກວດກາຢັ້ງຢືນຈາກຄະນະຮັບຜິດຊອບໂຄງການ, ໃຫ້ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ປະກອບເອກະສານລາຍງານຜົນສຳເລັດໂຄງການຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນ ເຖິງອົງການປະເມີນໂຄງການລົງທຶນຂອງລັດ ເພື່ອດຳເນີນການປະເມີນຜົນໂຄງການ ຫຼັງຈາກໄດ້ຮັບຜົນການປະເມີນແລ້ວ ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການຈຶ່ງນຳສະເໜີຕໍ່ເຈົ້າຂອງໂຄງການ ເພື່ອອະນຸມັດມອບ-ຮັບໂຄງການ.

**20 . ມາດຕາ 72 ການຊຳລະມູນຄ່າໂຄງການລົງທຶນຂອງລັດ**

ທຸກໂຄງການລົງທຶນຂອງລັດ ກ່ອນຈະໄດ້ຮັບການຊຳລະໂຄງການຕ້ອງໄດ້ຮັບການກວດກາຜົນສຳເລັດຂອງໜ້າວຽກໂຄງການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ແລະ ການສະໜອງວັດຖຸອຸປະກອນໃຫ້ປະຕິບັດ ດັ່ງນີ້ :

- ໂຄງການປະເພດ I ແລະ ປະເພດ II: ການກວດກາໜ້າວຽກ ປີທີ 1 ຕ້ອງບໍ່ໃຫ້ຫຼຸດ 15% ຂອງມູນຄ່າໂຄງການ ໄດ້ແກ່:
    + ໂຄງການປະເພດ I ການກວດກາໜ້າວຽກ ບໍ່ໃຫ້ເກີນ 7 ຄັ້ງ.
    + ໂຄງການປະເພດ II ການກວດກາໜ້າວຽກ ບໍ່ໃຫ້ເກີນ 6 ຄັ້ງ.
- ໂຄງການປະເພດ III: ການກວດກາໜ້າວຽກ ປີທີ 1 ຕ້ອງບໍ່ໃຫ້ຫຼຸດ 20% ຂອງມູນຄ່າໂຄງການ, ແຕ່ການກວດກາໜ້າວຽກບໍ່ໃຫ້ເກີນ 5 ຄັ້ງ.
- ໂຄງການປະເພດ IV: ການກວດກາໜ້າວຽກ ປີທີ 1 ຕ້ອງບໍ່ໃຫ້ຫຼຸດ 25% ຂອງມູນຄ່າໂຄງການ, ແຕ່ການກວດກາໜ້າວຽກບໍ່ໃຫ້ເກີນ 4 ຄັ້ງ.
- ໂຄງການປະເພດ V: ການກວດກາໜ້າວຽກ ປີທີ 1 ຕ້ອງບໍ່ໃຫ້ຫຼຸດ 35% ຂອງມູນຄ່າໂຄງການແຕ່ການກວດກາໜ້າວຽກບໍ່ໃຫ້ເກີນ 3 ຄັ້ງ.

ການກວດກາຜົນສຳເລັດຂອງໜ້າວຽກ ແຕ່ລະຄັ້ງຕ້ອງໄດ້ມີການຢັ້ງຢືນຄວາມຖືກຕ້ອງຈາກຄະນະຮັບຜິດຊອບໂຄງການເຊິ່ງປະກອບດ້ວຍ: ເຈົ້າຂອງໂຄງການ ຫຼື ອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ, ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງການເຕັກນິກ ແລະພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ເຈົ້າຂອງໂຄງການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກຕາມແບບຟອມຂອງກະຊວງແຜນການ ແລະ ການລົງທຶນໃນແຕ່ລະປີໃຫ້ກະຊວງແຜນການ ແລະການລົງທຶນ.

ການຊຳລະໂຄງການລົງທຶນຂອງລັດ ພາຍຫຼັງທີ່ໂຄງການໄດ້ຖືກຈັດຕັ້ງປະຕິບັດ ແລະ ໄດ້ຜ່ານການກວດກາ ແລະ ຢັ້ງຢືນການປະຕິບັດວຽກຈາກຄະນະຮັບຜິດຊອບໂຄງການແລ້ວອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ດຳເນີນການປະກອບເອກະສານຄົບຊຸດ (ລາຍການເອກະສານກະຊວງແຜນການ ແລະ ການລົງທຶນ ໄດ້ກຳນົດອອກໃນແຕ່ລະໄລຍະ) ນຳສະເໜີເຖິງກົມແຜນການ, ກະຊວງ

ແຜນການ ແລະ ການລົງທຶນ (ສຳລັບໂຄງການຢູ່ຂັ້ນສູນກາງ) ແລະ ພະແນກແຜນການ ແລະ ການລົງທຶນ (ສຳລັບໂຄງການຢູ່ຂັ້ນທ້ອງຖິ່ນ) ເພື່ອຄົ້ນຄວ້າ ແລະ ອອກໃບຢັ້ງຢືນການຊຳລະໂຄງການລົງທຶນຂອງລັດ, ແລ້ວນຳສະເໜີເຖິງກະຊວງການການເງິນ (ສຳລັບໂຄງການຢູ່ຂັ້ນສູນກາງ) ຫຼື ພະແນກການເງິນແຂວງ, ນະຄອນຫຼວງ (ສຳລັບໂຄງການຢູ່ຂັ້ນທ້ອງຖິ່ນ) ເພື່ອດຳເນີນການຂັ້ນຕໍ່ໄປ.

## 21 . ມາດຕາ 95 ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ

ອົງການກວດກາພາຍນອກມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ສະພາແຫ່ງຊາດ ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ໂຄງການລົງທຶນຂອງລັດ.
2. ສະພາປະຊາຊົນຂັ້ນແຂວງ ກວດກາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ໂຄງການລົງທຶນຂອງລັດຂອງແຂວງ, ນະຄອນຫຼວງ ແລະ ໂຄງການຂອງຂະແໜງການທີ່ໄປຈັດຕັ້ງປະຕິບັດຢູ່ ແຂວງ, ນະຄອນຫຼວງນັ້ນ;
3. ອົງການກວດສອບແຫ່ງລັດ ກວດກາການນຳໃຊ້ງົບປະມານ, ຄວາມໂປ່ງໃສໃນການເບີກຈ່າຍງົບປະມານ ໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
4. ອົງການກວດກາລັດ ກວດກາຄວາມໂປ່ງໃສໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ;
5. ອົງການປົກຄອງທ້ອງຖິ່ນ ກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ, ເຂົ້າຮ່ວມການກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຢູ່ທ້ອງຖິ່ນຕົນ;
6. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເຂົ້າຮ່ວມໃນການກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນ;
7. ປະຊາຊົນ ຕິດຕາມ, ລາຍງານການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ບໍ່ຖືກຕ້ອງຊຶ່ງຈະສ້າງຄວາມເສຍຫາຍແກ່ສາທາລະນະ ຫຼື ຜົນປະໂຫຍດລວມຂອງຊາດ.

ສຳລັບການປະຕິບັດຜົນການກວດກາຂອງອົງການກວດກາລັດຖະບານ, ພາຍຫຼັງທີ່ມີມະຕິສະພາຮັບຮອງເອົາບົດລາຍງານການກວດກາຂອງອົງການກວດກາລັດຖະບານ ແລະ ອົງການກວດກາລັດຖະບານໄດ້ອອກແຈ້ງການ ໃຫ້ປະຕິບັດຜົນການກວດກາ, ຂະແໜງແຜນການ ແລະ ການລົງທຶນຕ້ອງໄດ້ສັງລວມເອົາບັນດາໂຄງການທີ່ປະຕິບັດຜົນການກວດກາ ລາຍງານຕໍ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາຮັບຮອງ; ໃນນີ້, ໂຄງການທີ່ຈະປະຕິບັດຜົນການກວດກາ ທີ່ຢູ່ໃນຄວາມຮັບຜິດຊອບຂອງແຂວງ ແມ່ນສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງຕາມທີ່ໄດ້ກຳນົດໃນມາດຕາ 39, 54, 55 ແລະ 57 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015.

## 22 . ມາດຕາ 100 ມາດຕະການປັບໃໝ

ມາດຕະການປັບໃໝ ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຜ່ານການກ່າວເຕືອນ ແລະ ສຶກສາອົບຮົມແລ້ວ ແຕ່ຫາກບໍ່ເຂັດຫຼາບ, ກໍ່ຄວາມເສຍຫາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາໃຫ້ປະຕິບັດຕາມ

ມາດຕາ 11 ໝວດທີ 2 ຂອງກົດໝາຍວ່າດ້ວຍການຕ້ານສໍ້ລາດບັງຫຼວງ ສ່ວນການປັບໃໝຜູ້ກະທຳຜິດແມ່ນໃຫ້ປະຕິບັດຕາມມາດຕາ 62 ໝວດທີ 9 ຂອງກົດໝາຍວ່າດ້ວຍການຕ້ານສໍ້ລາດບັງຫຼວງ.

## III. ການຈັດຕັ້ງປະຕິບັດ

1. ມອບໃຫ້ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງໂຄສະນາ, ເຜີຍແຜ່, ແນະນຳ ແລະ ປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຜົນດີ.
2. ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານ ແລະ ປະສານກັບກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ແລະ ແນະນຳແກ້ໄຂຕາມຄວາມເໝາະສົມໃຫ້ທັນເວລາ.

## IV. ຜົນສັກສິດ

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຄຳແນະນຳສະບັບນີ້ປ່ຽນແທນຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 2129/ກຜທ, ລົງວັນທີ 19 ກັນຍາ 2019.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີ

ສອນໄຊ ສີພັນດອນ

# ເອກະສານຄັດຕິດ

## ❖ ນິຕິກຳໃຕ້ກົດໝາຍ ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ

1. ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 0889/ກຜທ, ລົງວັນທີ 09 ມິຖຸນາ 2021.

## ❖ ນິຕິກຳໃຕ້ກົດໝາຍ ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ

1. ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05ມັງກອນ 2018;
2. ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 7 ມິຖຸນາ 2018;
3. ດຳລັດວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸ້ມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2019;
4. ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະ ການຄຸ້ມຄອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປ ລາວ ສະບັບເລກທີ 1815/ກຜທ, ລົງວັນທີ 30 ກໍລະກົດ 2018;
5. ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ສະບັບເລກທີ 002/ຄລທ.ສ, ລົງວັນທີ 20 ສິງຫາ 2018;
6. ຂໍ້ຕົກລົງ ວ່າດ້ວຍການວາງເງິນຄ້ຳປະກັນສຳລັບກິດຈະການສຳປະທານ ສະບັບເລກທີ 2735/ກຜທ, ລົງວັນທີ 02 ພະຈິກ 2018;
7. ຄຳແນະນຳ ກ່ຽວກັບການນຳໃຊ້ຕາປະທັບຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 001/ຄລທ, ລົງວັນທີ 08 ມິຖຸນາ 2018;
8. ບົດແນະນຳວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າ ຂອງວິສາຫະກິດ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019;
9. ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານສຳລັບປູກພືດກະສິກຳ ສະບັບເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019;
10. ຄຳແນະນຳກ່ຽວກັບ ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດສະບັບເລກທີ 0760/ກຜທ, ລົງວັນທີ 14 ພຶດສະພາ 2021.

## ❖ ນິຕິກຳໃຕ້ກົດໝາຍ ຂອງກົດໝາຍວ່າດ້ວຍສະຖິຕິ

1. ຄຳສັ່ງ ວ່າດ້ວຍການການປະຕິບັດວຽກງານສະຖິຕິລະບົບສາຍຂວາງ ສະບັບເລກທີ 19/ນຍ, ລົງວັນທີ 31 ທັນວາ 2018.

ພິມທີ່ ໂຮງພິມແຫ່ງລັດ
ເລກທີອະນຸຍາດໂດຍກະຊວງຍຸຕິທຳ 259/ກຍ.ກຄຜ
ພິມຄັ້ງທີ່ 1 ຈຳນວນ 100 ເຫຼັ້ມ
ຂະໜາດ 19 X 25 ຊມ